# ຄວາມຮູ້ພື້ນຖານ
# ປັດຈະຍາ
# ມາກ-ເລນິນ

ชุหิ่ม บุนนาค

# ຄວາມຮູ້ພື້ນຖານ ປັດຊະຍາ ມາກ-ເລນິນ

ປຶ້ມອ່ານປະກອບ

ສຳນັກພິມ "ກ້າວໜ້າ"
ມົດສະກູ

ແປໂດຍ: ສົມມະໂນ ພົນເສນາ

**ОСНОВЫ МАРКСИСТСКО-ЛЕНИНСКОЙ ФИЛОСОФИИ**

**Под редакцией Б. И. Сюсюкалова и В. В. Острякова**

***на лаосском языке***

© ສຳນັກພິມ "ກ້າວໜ້າ", 1985

ພິມໃນສະຫະພາບໂຊວຽດ

О $\frac{0392020000-086}{014(01)-85}$ без объявл.

# ລັດທິວັດຖຸນິຍົມ
# ສັດຈະວິພາກ

ອຸທົນ ບຸບະຍາວົງ

# ພາກທີ ໜຶ່ງ

## ປັດຊະຍາ ແມ່ນຫຍັງ ?
## ຄວາມໝາຍຂອງມັນໃນຊີວິດຂອງສັງຄົມ

### ໑. ປັດຊະຍາຄົ້ນຄວ້າບັນຫາຫຍັງ ? ບັນຫາພື້ນຖານຂອງປັດຊະຍາ.

ວິທະຍາສາດຕ່າງໆ ກໍຄືທັດສະນະຕ່າງໆດ້ານ ທຳມະຈະລິຍາ, ການເມືອງ ແລະ ອື່ນໆ ທີ່ມີໃນສັງຄົມນັ້ນ ລ້ວນແຕ່ແມ່ນຮູບແບບຫລືຮູບການຕ່າງໆຂອງຈິດສຳນຶກ. ແຕ່ລະຮູບແບບ ແລະ ຮູບການລ້ວນແຕ່ສະທ້ອນໃຫ້ເຫັນເຖິງດ້ານໃດ ດ້ານໜຶ່ງຂອງຄວາມເປັນຈິງ, ກໍ່ຕັ້ງຄວາມຮັບຮູ້ອັນແນ່ນອນ, ຊ່ວຍຄົນເຮົາໃຫ້ເຂົ້າໃຈປະກົດການຮອບຕົວ ແລະ ກໍ່ສ້າງຊີວິດຂອງຕົນ.

ໜຶ່ງໃນຈຳນວນຮູບການຂອງຈິດສຳນຶກ ດ້ານສັງຄົມນັ້ນ ແມ່ນປັດຊະຍາທີ່ໄດ້ກຳເນີດຂຶ້ນ ລະຫວ່າງສາມພັນປີກ່ອນໜ້ານີ້ ໃນສັງຄົມຂ້າທາດ ແລະ ໃນຕົວຈິງແລ້ວ, ໃນໄລຍະຕົ້ນປັດຊະຍາໄດ້ສະແດງເຖິງທຸກໆ ຄວາມຮູ້ ຂອງຄົນເຮົາ ກ່ຽວກັບ ໂລກຮອບຕົວ. ມັນບໍ່ແມ່ນການບັງເອີນ ທີ່ສັບ "ຟີໂລໂຊຟີ " (ປັດຊະຍາ ) ເປັນພາສາກະເຣັກບູຮານນັ້ນ ໝາຍເຖິງຄວາມຮັກຕໍ່ຄວາມປີຊາສາມາດ ແລະ ບັນດານັກປັດຊະຍາໃນສະໄໝນັ້ນ ໄດ້ຮັບຄວາມນັບຖືເປັນຜູ້ປີຊາສາມາດ ແລະ ມີຄວາມຮູ້ຮອບດ້ານ. ແຕ່ພ້ອມກັນກັບວັນເວລາ ທີ່ໄດ້ຜ່ານພົ້ນໄປ, ພ້ອມກັນກັບການຂະຫຍາຍຕົວຂອງການຜະລິດ, ຂອງຊີວິດ ສັງຄົມນັ້ນແລ້ວ ຄວາມຮູ້ຂອງຄົນເຮົາກໍ່ຊຸດົມສົມບູນຂຶ້ນເຊັ່ນດຽວກັນ. ໄດ້ ເກີດມີຂະແໜງສະເພາະດ້ານຄວາມຮູ້ ທີ່ແຕກຕ່າງກັບ ປັດຊະຍາ ເຊັ່ນ ວິຊາ ເລຂາຄະນິດ, ຄະນິດສາດ, ດາລາສາດ ແລະ ອື່ນໆ. ດັ່ງນີ້ ຂອບເຂດຂອງບັນຫາທີ່ປັດຊະຍາຕ້ອງຄົ້ນຄວ້າ ຈຶ່ງໄດ້ຮັບການກຳນົດຢ່າງຈະແຈ້ງ ກວ່າເກົ່າ ໄດ້ເກີດມີຂະແໜງຄົ້ນຄວ້າບັນຫາປັດຊະຍາໂດຍສະເພາະ.

ຕາມທຳມະຊາດຂອງມັນແລ້ວ ໂລກເປັນແນວໃດ ? ມັນດຳລົງຄົງ ຕົວຕາມ ກົດເກນຂອງມັນຕະຫລອດມາ ຫລືມີພະເຈົ້າ ເຊິ່ງເປັນຜູ້ມີກຳລັງ ຈິດແບບມະຫັດສະຈັນນັ້ນ ເປັນຜູ້ສ້າງຂຶ້ນ ແລະ ຄຸ້ມຄອງມັນ ? ຄົນແມ່ນຫຍັງ , ຄົນມີບົດບາດຫຍັງໃນໂລກນີ້ ? ຄົນສາມາດຈະຮັບຮູ້ປະກົດການ ແລະວິວັດທະນາການ ຂອງທຳມະຊາດ ແລະ ສັງຄົມ ແລະ ສາມາດຈະສົ່ງຜົນສະທ້ອນ ຕໍ່ປະກົດການ ແລະ ວິວັດທະນາການດັ່ງກ່າວນັ້ນຫລືບໍ່, ວິທີການສົ່ງຜົນສະທ້ອນດັ່ງກ່າວເປັນແນວໃດ ?

ທຸກໆບັນຫາເຫຼົ່ານີ້ ແມ່ນບັນຫາພື້ນຖານ ແລະ ມີລັກສະນະສັງລວມ ທີ່ສຸດຂອງການດຳລົງຄົງຕົວ ແລະ ການຮັບຮູ້. ຖ້າຫາກວິທະຍາສາດຕ່າງໆ ຄົ້ນຄວ້າບາງດ້ານຫລືວິວັດທະນາການຕ່າງໆ ຂອງທຳມະຊາດ ແລະ ສັງຄົມ - (ເຊັ່ນຄະນິດສາດ ຄົ້ນຄວ້າການພົວພັນດ້ານປະລິມານ, ຊີວະສາດຄົ້ນຄວ້າ ຊີວິດ, ເສດຖະສາດ-ການເມືອງ ຄົ້ນຄວ້າການພົວພັນດ້ານເສດຖະກິດຂອງຄົນ ແລະ ອື່ນໆ) ແລ້ວແມ່ນວ່າປັດຊະຍາ ພົວພັນເຖິງທຸກໆດ້ານ ແລະ ທຸກໆວິວັດທະນາການ, ພົວພັນເຖິງທົ່ວໂລກເວົ້າລວມ. ມັນແມ່ນຄວາມຮູ້ ກ່ຽວກັບທຸກໆບັນຫາເວົ້າລວມ ແລະ ນີ້ເອງແມ່ນຈຸດພິເສດຕົ້ນຕໍຂອງມັນ.

ປັດຊະຍາກໍ່ຕັ້ງທັດສະນະຂອງຄົນ ກ່ຽວກັບໂລກເວົ້າລວມ, ຕະຫລອດທັງຄວາມເຂົ້າໃຈຕໍ່ໂລກ. ດັ່ງນັ້ນປັດຊະຍາເຮັດໃຫ້ຄົນມີພື້ນຖານທິດສະດີ ທົ່ວໄປກ່ຽວກັບຄວາມເຂົ້າໃຈຕໍ່ໂລກ ຫລືໂລກະທັດ. ທັດສະນະປັດຊະຍາຕ່າງໆສົ່ງຜົນສະທ້ອນຕໍ່ແບບປະພຶດຕົວຂອງຄົນ, ຕໍ່ທ່າທີຂອງພວກເຂົາເຈົ້າ ຕໍ່ທຳມະ - ຊາດ ແລະ ສັງຄົມ, ຕໍ່ຄົນຜູ້ອື່ນ, ຕໍ່ຫລັກຫມັ້ນກ່ຽວກັບບັນຫາຕ່າງໆດ້ານ ສັງຄົມ. ໂດຍຂຶ້ນກັບທັດສະນະປັດຊະຍາຂອງຕົນ ຄົນສາມາດເປັນນັກປະຕິວັດຫລືເປັນນັກຮັກສາຮີດເດີມ, ເປັນຜູ້ມີມະນຸດສະທຳ ຫລືເປັນຜູ້ກຽດຊັງມະນຸດດ້ວຍກັນ, ເປັນຜູ້ຕໍ່ສູ້ເພື່ອອະນາຄົດ ອັນດີກວ່າເກົ່າ ຫລືເປັນຜູ້ປົກປັກຮັກສາລະບຽບສັງຄົມທີ່ຫລ້າຫລັງ ແລະ ໄຮ້ຄວາມເປັນທຳ.

ທຸກໆບັນຫາປັດຊະຍາຕິດພັນຢ່າງແຫນ້ນແຟ້ນ ກັບບັນຫາພື້ນຖານ ບັນຫາຫນຶ່ງ ແລະ ຂຶ້ນກັບບັນຫານີ້ ແບບໃດແບບຫນຶ່ງ. ນັ້ນຄືບັນຫາວ່າດ້ວຍການພົວພັນດ້ານວັດຖຸ ແລະ ຈິດໃຈ, ວັດຖຸ ແລະ ຈິດສຳນຶກ, ການດຳລົງຄົງ ຕົວ ແລະ ຈິນຕະນາການ. ຄົນເຮົາສັງເກດເຫັນແຕ່ດົນແລ້ວວ່າ ໃນໂລກນີ້ມີປະ

ກົດການດ້ານວັດຖຸ ແລະ ຈິດໃຈ ແລະ ໄດ້ຄົ້ນຄວ້າທຳມະຊາດການເປັນ ມາ ຂອງປະກົດການດັ່ງກ່າວ ແລະ ການພົວພັນກັນລະຫວ່າງພວກມັນ. ແຕ່ການ-ອະທິບາຍເລື່ອງການພົວພັນທຳນອງນີ້ ຊຶ່ງໃນສະໄໝນັ້ນແມ່ນການອະທິ ບາຍ ທາງສາສະໜາເປັນຕົ້ນຕໍນັ້ນ ບໍ່ສາມາດສາງຄວາມເພິ່ງພໍໃຈໃຫ້ແກ່ສະຕິ ປັນ ຍາທີ່ຊອກຄົ້ນຫາຄວາມຈິງໄດ້.

ເປັນຄັ້ງທຳອິດໃນປະ ຫວັດສາດຂອງແນວຄິດປັດຊະຍາ ທີ່ ກ.ມາກແລະ ຟ.ອັງແກນ ໄດ້ວາງບັນຫາ ແລະ ຕັ້ງບັນຫານີ້ຂຶ້ນ ແບບວິທະຍາສາດ, ອັນ ກາຍເປັນພື້ນຖານເພື່ອອະທິບາຍ ແລະ ຈັດແບ່ງກະແສຕ່າງໆຂອງຄວາມ ຮູ້ ດ້ານປັດຊະຍາ. ແນ່ນອນວ່າ ກ່ອນໜ້ານີ້ ກະແສ ແລະ ຂະແໜງປັດຊະຍາ ຕ່າງໆກໍໄດ້ແກ້ໄຂບັນຫານີ້ ແບບນັ້ນຫລືແບບນີ້ແລ້ວ. ແຕ່ບໍ່ແມ່ນໝົດທຸກຄົນຮັບ ຮູ້ສິ່ງດັ່ງກ່າວນີ້, ດັ່ງນີ້ ຈຶ່ງບໍ່ມີການຕັ້ງບັນຫາລວມຂຶ້ນມາ. ຟ.ອັງແກນ ໄດ້ ຂຽນໃນປຶ້ມ. "ລູດວິກ ເຟເຢບາກ ແລະ ອະວະສານຂອງປັດຊະຍາກລາຊິກ ເຢຍລະມັນ" ວ່າ: ບັນຫາໃຫຍ່ພື້ນຖານ ຂອງປັດຊະຍາ...ເວົ້າລວມນັ້ນ - ແມ່ນບັນຫາການພົວພັນກັນລະຫວ່າງຈິນຕະນາການ ກັບການດຳລົງຄົງຕົວ"໑).

ບັນຫາທີ່ກ່າວມາຂ້າງເທິງນີ້ ມີສອງດ້ານ. ດ້ານໜຶ່ງແມ່ນການກຳນົດວ່າ ອັນໃດເປັນສິ່ງມີມາກ່ອນ ວັດຖຸຫລືຈິດໃຈ ? ອີກດ້ານໜຶ່ງ ແນວຄິດຂອງ ຄົນ ກ່ຽວກັບໂລກ, ຈິດສຳນຶກຂອງເຂົາມີຕໍ່ກະໂຕໂລກຂອງຄືແນວໃດ, ແນວ ຄິດ ແລະ ຈິດສຳນຶກດັ່ງກ່າວນັ້ນ ສະທ້ອນໃຫ້ເຫັນໂລກ ຖືກຕ້ອງຫລືບໍ່ ສາມາດຮັບ ຮູ້ໂລກຫລືບໍ່ ?

ໂດຍຂຶ້ນກັບບັນຫາທີ່ວ່າ ຈະຮັບຮູ້ສິ່ງໃດເປັນສິ່ງມີມາກ່ອນ ວັດຖຸ ຫລື ຈິດ ສຳນຶກນັ້ນ, ທຸກໆທິດສະດີປັດຊະຍາແບ່ງອອກເປັນສອງກະແສຕົ້ນຕໍ ຄື ວັດຖຸ ນິຍົມ ແລະ ຈິດຕະນິຍົມ ຊຶ່ງໄດ້ດຳເນີນການຕໍ່ສູ້ລະຫວ່າງກັນມາແຕ່ຕົ້ນ ແລະ ສືບຕໍ່ມາຈົນເຖິງປະຈຸບັນ. ນັກວັດຖຸນິຍົມທັງຫລາຍ ຖືວ່າວັດຖຸເປັນສິ່ງ ມີມາ ກ່ອນ ແລະ ຈິດສຳນຶກ ເປັນສິ່ງມີມາທີຫລັງ. ສຳລັບບັນດານັກຈິດຕະນິຍົມ ແລ້ວ ຈິດໃຈ, ແນວຄິດເປັນສິ່ງມີມາກ່ອນ. ແຕ່ລະຂະແໜງປັດຊະຍາ ຕ້ອງ ນອນຢູ່ໃນວັດຖຸນິຍົມ ຫລືຈິດຕະນິຍົມ ເພາະຕາມຄວາມຈິງແລ້ວ, ກະແສອື່ນໆ

---

໑) ກ.ມາກ ແລະ ຟ.ອັງແກນ.ປຶ້ມນິພົນ,ເຫລັ້ມ ໒໑, ໜ້າ ໒໘໒.

ທີ່ຈະເໜືອກວ່າ ຫລືຢູ່ລະຫວ່າງສອງກະແສຕົ້ນຕໍເຫຼົ່ານີ້ ແມ່ນບໍ່ມີ ແລະ ກໍບໍ່ອາດຈະມີມາໄດ້. ອັນນີ້ກໍເນື່ອງຈາກວ່າບັນຫາຕົ້ນຕໍຂອງປັດຊະຍາ ສາມາດແກ້ຕົກໄດ້ພຽງສອງແບບເທົ່ານັ້ນ.

ແນ່ນອນ ມີອີກກະແສໜຶ່ງຕົວຢ່າງລັດທິທະວິມູນນິຍົມທີ່ຖືວ່າມີຈຸດເລີ່ມສອງຈຸດ ເຊິ່ງເປັນສອງຈຸດທີ່ມີຄວາມໝາຍເທົ່າທຽມກັນ ແລະ ບໍ່ຂຶ້ນຕໍ່ກັນນັ້ນແມ່ນວັດຖຸ ແລະ ຈິດໃຈ. ແຕ່ມັນກໍນຳໄປເຖິງຈິດຕະນິຍົມເຊັ່ນດຽວກັນ ເພາະວ່າການທີ່ຮັບຮູ້ວ່າຈິດໃຈສາມາດຄົງຕົວຢ່າງເອກະລາດໄດ້ນັ້ນ ແມ່ນລັດທິ ຈິດຕະນິຍົມ. ລັດທິວັດຖຸນິຍົມ ຮັບຮູ້ການຄົງຕົວຂອງຈິດໃຈ ແລະ ແນວຄິດ ແຕ່ພວກມັນບໍ່ແມ່ນຄົງຕົວຢູ່ຢ່າງເອກະລາດ, ແລະ ຂຶ້ນກັບວັດຖຸ, ແມ່ນລັກສະນະ ສະເພາະຂອງວັດຖຸ ແລະ ແມ່ນຜົນຂອງວິວັດທະນາການ.

<u>ລັດທິວັດຖຸນິຍົມ</u> ໄດ້ຂະຫຍາຍຕົວ ແລະ ພວມຂະຫຍາຍຕົວໂດຍ ຜູກພັນຢ່າງແໜ້ນແຟ້ນກັບວິທະຍາສາດ. ໃນປະຫວັດສາດໄດ້ເກີດມີຫລາຍຮູບ ການວັດຖຸນິຍົມຢ່າງຕໍ່ເນື່ອງກັນມາ, ເຮັດໃຫ້ມັນນັບມື້ນັບມີລັກສະນະວິທະຍາສາດ-ຂຶ້ນ ແລະ ຕາມທຳມະດາແລ້ວ ໄດ້ສະແດງທັດສະນະຂອງບັນດາຊົນຊັ້ນທີ່ກ້າວໜ້າ.

<u>ລັດທິຈິດຕະນິຍົມ</u> ໄດ້ເຊື່ອມຈອດ ແລະ ພວມເຊື່ອມຈອດເຂົ້າຫາ ສາສະໜາ, ປະຕິບັດໜ້າທີ່ທາງສັງຄົມຢ່າງຄ້າຍຄືກັນກັບສາສະໜາ. ມັນແມ່ນທິດສະດີຈອມປອມ. ຕາມທຳມະດາແລ້ວ, ມັນສະແດງເຖິງທັດສະນະຂອງບັນດາຊົນຊັ້ນປະຕິການ. ຮັບຮູ້ກັນວ່າ ຈິດຕະນິຍົມມີສອງກະແສຄື ລັດທິຈິດຕະນິ ຍົມພາວະວິໄສ, ເຊິ່ງຕົວແທນໄດ້ແກ່ ປລາຕົງ (ປີ ໔໒໗ ຫລື ໔໒໘ ກ່ອນ ຄ.ສ.), ເຮເກນ ( ໑໗໗໐-໑໘໓໑) ແລະ ພວກລັດທິໂຕມິດໃໝ່, ແລະລັດທິຈິດຕະນິຍົມອັດຕະວິໄສ, ເຊິ່ງຕົວແທນໄດ້ແກ່ ເບີກເລ (໑໖໘໕-໑໗໕໓), ຮູມ (໑໗໑໑-໑໗໗໖), ກັງ (໑໗໒໔-໑໘໐໔) ພວກນິຍົມມາຊ (Mach) ພວກລັດທິປະຕິຖານນິຍົມໃໝ່, ພວກລັດທິຊົງຕົວນິຍົມ. ທັງສອງກະແສຂອງ-ລັດທິຈິດຕະນິຍົມເຫລົ່ານີ້ ຖືເອົາຈິດສຳນຶກເປັນສິ່ງມີມາກ່ອນ. ສຳລັບພວກຈິດຕະນິຍົມ ພາວະວິໄສແລ້ວ ມັນແມ່ນຈິດສຳນຶກທີ່ຄົງຕົວແບບພາວະວິໄສ ແລະບໍ່ແມ່ນຂອງມະນຸດ, ຄືຈິດສຳນຶກທີ່ກວມລວມໂລກດັ່ງ ເຮເກນ ໄດ້ຢັ້ງຢືນ, ຫລືຈິດສຳນຶກຂອງພະເຈົ້າດັ່ງພວກລັດທິ ໂຕມິດໃໝ່ ໄດ້ ຢັ້ງຢືນ. ສຳລັບ ພວກ

ຈິດຕະນິຍົມອັດຕະວິໄສແລ້ວ ນັ້ນແມ່ນຈິດສຳນຶກຂອງມະນຸດ-ຄືຄົນຜູ້ໜຶ່ງຫລືກຸ່ມຄົນເວົ້າລວມ ແລະ ຄວາມເປັນຈິງ ແລະ ການຄົງຕົວຂອງຄວາມເປັນຈິງອື່ນກັບຄວາມຮັບຮູ້ຂອງຄົນ.

ດ້ານທີສອງຂອງບັນຫາພື້ນຖານຂອງປັດຊະຍາ ກໍໄດ້ຮັບການແກ້ໄຂ ຢ່າງແຕກຕ່າງກັນ. ນັກປັດຊະຍາສ່ວນໜຶ່ງຮັບຮູ້ຄວາມສາມາດໃນການຮັບຮູ້ໂລກ. ບັນດານັກວັດຖຸນິຍົມທຸກຄົນ ລ້ວນແຕ່ມີທັດສະນະດັ່ງນີ້. ອີກພາກສ່ວນໜຶ່ງປະຕິເສດຄວາມສາມາດທີ່ຈະຮັບຮູ້ຄວາມເປັນຈິງ. ນັ້ນແມ່ນພວກອະວິຊາ ແລະທິດສະດີຂອງພວກເຂົາເຈົ້າແມ່ນລັດທິອະວິຊານິຍົມ ? ບັນດານັກຈິດຕະນິຍົມ ອັດຕະວິໄສທັງໝົດ ແລະ ພວກຈິດຕະນິຍົມພາວະວິໄສຈຳນວນໜຶ່ງ ລ້ວນແຕ່ຍຶດຖືທິດສະດີດັ່ງກ່າວນີ້.

ການແກ້ໄຂ ແລະ ກະໂຕການຕັ້ງບັນຫານີ້ ໃຫ້ຖືກຕ້ອງນັ້ນ ອຳນວຍ ໃຫ້ໄຈ້ແຍກ ຢ່າງຖືກຕ້ອງບັນດາກະແສ ແລະ ຂະແໜງຂອງປັດຊະຍາ ຊ່ອຍໃຫ້ຄົ້ນຄວ້າກະແສຂະແໜງເຫລົ່ານີ້ແບບວິທະຍາສາດ. ພວກມັນຍັງຊ່ອຍໃຫ້ ແກ່ການແກ້ໄຂຢ່າງມີໝາກຜົນຫລາຍບັນຫາວິທະຍາສາດທຳມະຊາດ ແລະ ສັງຄົມ, ການເຄື່ອນໄຫວ ດັດສ້າງແບບປະຕິວັດຂອງບັນດາຊົນ ຊັ້ນ ແລະ ພັກທີ່ກ້າວໜ້າ.

ເຊັ່ນ, ຖ້າຫາກເງື່ອນໄຂດ້ານວັດຖຸຂອງຊີວິດຂອງຄົນເປັນສິ່ງຕັດສິນ ຈິດສຳນຶກຂອງພວກເຂົາເຈົ້າແລ້ວ ແມ່ນວ່າລະບຽບການໃໝ່ທາງສັງຄົມທີ່ ກ້າວໜ້າ ກາຍເປັນສິ່ງທີ່ຈຳເປັນນັ້ນ ບໍ່ແມ່ນຍ່ອນວ່າໄດ້ເກີດມີທິດສະດີໃໝ່, ທັດສະນະໃໝ່ ແຕ່ຍ່ອນວ່າການຂະຫຍາຍຕົວຂອງຊີວິດດ້ານວັດຖຸຂອງສັງຄົມ ນັ້ນໄດ້ນຳໄປເຖິງບ່ອນນີ້, ແລະ ມັນໄດ້ຖືກຮັບຮູ້ໃນຮູບການທິດສະດີ ແລະທັດສະນະໃໝ່. ໃນຜົນສຸດທ້າຍ ຫລັງຈາກນັ້ນ ເງື່ອນໄຂຊີວິດໃໝ່ ເປັນເຫດຜົນທີ່ພາໃຫ້ເກີດມີຈິດສຳນຶກໃໝ່ຂອງມະຫາຊົນອັນກວ້າງຂວາງ, ຂອງທຸກໆຄົນ.

ການຂະຫຍາຍຕົວຂອງປັດຊະຍາ ສ່ອງແສງເຖິງຊີວິດຂອງສັງຄົມ ແລະ ກຳນົດດ້ວຍຊີວິດຂອງສັງຄົມ. ໃນທັດສະນະຕ່າງໆດ້ານປັດຊະຍານັ້ນ ມີການສ່ອງແສງແບບກວມລວມເຖິງການປ່ຽນແປງໃນການຜະລິດຊັບສິນວັດຖຸ, ໃນວິທະຍາສາດ ແລະ ວັດທະນະທຳ, ໂດຍສະເພາະໃນລະບອບ ສັງຄົມ. ຫາກແຕ່ການສ່ອງແສງນີ້ອາດຈະແຕກຕ່າງກັນໃນສັງຄົມອັນດຽວກັນ, ຍ່ອນ ຊັ້ນຄົນ

ຕ່າງໆໃນສັງຄົມຕີລາຄາບັນດາລະບຽບການດ້ານສັງຄົມດຽວກັນ, ຕີລາ ຄາບາງປະກົດ ການ ແລະ ການພົວພັນລະຫວ່າງຄົນຢ່າງແຕກຕ່າງກັນ, ເພາະວ່າເງື່ອນໄຂຊີວິດການເປັນຢູ່ເປັນສິ່ງຕັດສິນ, ແລະ ຢູ່ໃນສັງຄົມທີ່ມີຊົນຊັ້ນນັ້ນຊັ້ນຄົນຕ່າງກັນມີເງື່ອນໄຂຊີວິດການເປັນຢູ່ແຕກຕ່າງກັນ. ດ້ວຍເຫດນັ້ນ ເນື້ອໃນຂອງທັດສະນະປັດຊະຍາ, ລັກສະນະຂອງທັດສະນະດັ່ງກ່າວ, ລະດັບວິທະຍາສາດ, ທ່າທີຕໍ່ທິດສະດີໃນອະດີດ ແລະ ປະຈຸບັນໃນຂັ້ນຕັດສິນ ຂຶ້ນກັບສິ່ງທີ່ວ່າ ກະແສ ແລະ ຂະແໜງໃດໜຶ່ງນັ້ນ ຕາງໜ້າໃຫ້ແກ່ຜົນປະໂຫຍດ ຂອງຊົນຊັ້ນໃດ. ໝາຍຄວາມວ່າ ແຕ່ລະປັດຊະຍາໃນສັງຄົມທີ່ມີຊົນຊັ້ນຕ້ອງມີ ລັກສະນະຊົນຊັ້ນ, ລັກສະນະພັກ, ຕາງໜ້າ ແລະ ປົກປັກຮັກສາ ຜົນປະໂຫຍດຂອງຊົນຊັ້ນອັນແນ່ນອນ. ນີ້ແມ່ນປະກົດການດ້ານສັງຄົມຢ່າງພາວະວິໄສ. ມັນຍັງໄດ້ສະແດງອອກ ໃນການຕໍ່ສູ້ ລະຫວ່າງບັນດາກະແສປັດຊະຍາ ທີ່ໄດ້ສ່ອງແສງເຖິງການຕໍ່ສູ້ຂອງບັນດາຊົນຊັ້ນໃນສັງຄົມ. ວ.ອີ.ເລນິນ ສະຫລຸບ ບົດ "ວັດຖຸນິຍົມ ແລະ ລັດທິບົດຮຽນ ຕຳໜິວິພາກ" ໂດຍຂຽນວ່າ: "... ໃນດ້ານຫລັງຂອງລັດທິຄຳພີຊີສິງ ແບບວິຊານິຍົມ ຂອງລັດທິບົດຮຽນຕຳໜິວິພາກຕ້ອງມີການຕໍ່ສູ້ ລະຫວ່າງພັກພວກ ຢູ່ໃນປັດຊະຍາ, ການຕໍ່ສູ້ເຊິ່ງ ໃນຜົນສຸດທ້າຍໄດ້ສະແດງເຖິງທ່າອຽງ ແລະ ແນວຄິດຂອງບັນດາຊົນຊັ້ນ ທີ່ເປັນ ປໍລະປັກກັນໃນສັງຄົມທັນສະໄໝ; ປັດຊະຍາໃໝ່ທີ່ສຸດ ກໍມີລັກສະນະພັກເຊັ່ນດຽວກັນ ກັບໃນສະໄໝ ສອງພັນປີກ່ອນໜ້ານີ້. ພັກທີ່ຕໍ່ສູ້ຕ້ານກັນນັ້ນ ໃນທາດແທ້ແລ້ວ...ແມ່ນລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມ" ໑).

ສ່ອງແສງເຖິງຊີວິດຂອງສັງຄົມ, ກະໂຕປັດຊະຍາເອງ ມີບົດບາດອັນຕັ້ງໜ້າ, ສົ່ງຜົນສະທ້ອນອັນໜັກແໜ້ນຕໍ່ຊີວິດຂອງສັງຄົມ. ລັກສະນະ ແລະທິດທາງຂອງຜົນສະທ້ອນນີ້ ຂຶ້ນກັບລັກສະນະຂອງປັດຊະຍາ, ຂຶ້ນກັບທີ່ຕັ້ງດ້ານຊົນຊັ້ນຂອງມັນ. ປັດຊະຍາຂອງຊົນຊັ້ນປະຕິການ ເຊີດຊູການຮັກສາລະບຽບການທີ່ຫລ້າສະໄໝ, ກີດຂວາງບໍ່ໃຫ້ມີການປ່ຽນແປງທີ່ກ້າວໜ້າ. ປັດຊະຍາຂອງຊົນຊັ້ນປະຕິວັດທີ່ກ້າວໜ້ານັ້ນ ຊ່ວຍເຫລືອການຜ່ານຜ່າສິ່ງທີ່ຫລ້າສະໄໝ, ກໍ່ສ້າງ ແລະ ຂົນຂວາຍຄົນເຂົ້າຮ່ວມການຕໍ່ສູ້ເພື່ອສິ່ງໃໝ່ .

---

໑ ) ວ.ອີ.ເລນິນ, ບົດນິພົນຄົບຊຸດ, ເຫລັ້ມ ໑໘, ໜ້າ ໓໘໐.

## ໔. ບັນຫາແບບວິທີ ໃນປັດຊະຍາ

ບັນຫາວ່າດ້ວຍຄວາມອາດສາມາດວິທີການແລະ ພາຫະນະຂອງການຮັບຮູ້ ຫລືວ່າບັນຫາວ່າດ້ວຍແບບວິທີຂອງການຮັບຮູ້ນັ້ນ ເວລາໃດ ກໍ່ເຄີຍມີ ແລະຍັງມີທີ່ຕັ້ງທີ່ສຳຄັນ ໃນປັດຊະຍາ. ແບບວິທີແມ່ນລະບົບການກະທຳ,ວິທີການຫລັກໃນການຄົ້ນຄວ້າ ແລະ ການເຄື່ອນເໜັງບົນເສັ້ນທາງເດີນໄປສູ່ສັດຈະທຳ . ຜົນຂອງການຄົ້ນຄວ້າ ແລະ ຂອງວຽກງານທົ່ວໄປນັ້ນ ຕິດພັນໂດຍກົງກັບແບບວິທີ ທີ່ໄດ້ນຳໃຊ້, ເພາະວ່າແບບວິທີເປັນສິ່ງຊີ້ທາງເດີນ ແລະ ວິທີການຮັບຮູ້ເປົ້າໝາຍຕ່າງໆ. ຟ.ເບຄອນ (໑໕໖໑-໑໖໒໖) ນັກປັດຊະຍາອັງກິດ,ນັກວັດຖຸນິຍົມ ໄດ້ຢືນຢັນຄວາມໝາຍຂອງແບບວິທີ ແລະ ໄດ້ກ່າວວ່າ ແມ່ນ ກະທັງຄົນຂາເຄທີ່ຖືຕະກຽງເຍືອງທາງ ຍັງຈະເດີນໄປເຖິງຈຸດໝາຍໄວກວ່າຄົນຂາດີ ທີ່ງົມທາງໄປທ່າມກາງຄວາມມືດມົນ. ດ້ວຍເຫດນັ້ນ ການຄົ້ນຊອກ ຫາແບບວິທີທີ່ມີຜົນສັກສິດນັ້ນ ເວລາໃດກໍ່ເຄີຍແມ່ນ ແລະ ແມ່ນໜຶ່ງໃນ ຈຳນວນໜ້າທີ່ ທີ່ສຳຄັນຂອງທຸກໆວິທະຍາສາດ ແລະ ປັດຊະຍາ.

ແບບວິທີທີ່ໄດ້ຄົ້ນຄິດຂຶ້ນມາໃນບັນດາວິທະຍາສາດສະເພາະນັ້ນ ໃຊ້ໄດ້ສຳລັບແຕ່ບັນດາຂົງເຂດທີ່ຈຳກັດຂອງການຄົ້ນຄວ້າເທົ່ານັ້ນ. ເຊັ່ນຕົວຢ່າງ ແບບວິທີຊີວະສາດໃຊ້ໄດ້ພຽງແຕ່ສຳລັບມັນ ແລະ ໃຊ້ເພື່ອຄົ້ນຄວ້າປະກົດການດ້ານວັດຖຸສາດ ຫລືສັງຄົມສາດບໍ່ໄດ້. ບັນດາແບບວິທີຂອງວິທະຍາສາດອື່ນໆ ກໍມີລັກສະນະເຊັ່ນດຽວກັນ. ໂດຍແຕກຕ່າງກັນກັບແບບວິທີເຫລົ່ານີ້ ປັດຊະຍາຄົ້ນຄິດ ບັນດາແບບວິທີທີ່ມີລັກສະນະກວມລວມ ແລະ ສາມາດໃຊ້ໄດ້ໃນທຸກໆ ຂະແໜງການວິທະຍາສາດ ແລະ ໃນການເຄື່ອນໄຫວທຸກໆປະເພດ. ຄວາມ-ຮຽກຮ້ອງຕ້ອງການຂອງແບບວິທີດັ່ງກ່າວມີຄວາມໝາຍສຳລັບການຄົ້ນຄວ້າທຸກທຸກປະກົດການຂອງທຳມະຊາດ, ສັງຄົມ ແລະ ການເຄື່ອນໄຫວຂອງຄົນ.

ໃນປັດຊະຍາ, ທ່າມກາງການຂະຫຍາຍຕົວຂອງມັນ ໄດ້ເກີດມີສອງແບບວິທີລວມພື້ນຖານ, ເປັນສອງແບບວິທີທີ່ກົງກັນຂ້າມກັນໃນທາດແທ້ຄືແບບວິທີສັດຈະວິພາກ ແລະ ແບບວິທີອະພິທຳ. ລະຫວ່າງຜູ້ຕາງໜ້າຂອງສອງແບບ ວິທີດັ່ງກ່າວ ເວລາໃດກໍ່ເຄີຍດຳເນີນ ແລະ ພວມດຳເນີນການຕໍ່ສູ້.

ຄວນຊີ້ແຈງວ່າ ປັດຊະຍາບໍ່ພຽງແຕ່ເວົ້າເຖິງການທີ່ວ່າ ຕາມທຳມະ -

ຊາດຂອງຕົນແລ້ວ ໂລກເປັນແນວໃດ, ທາດແທ້ຂອງໂລກເປັນແນວໃດ ເທົ່ານັ້ນ, ແຕ່ຍັງເວົ້າເຖິງສະພາບການຂອງໂລກເປັນແນວໃດ-ມັນມີການ ປ່ຽນແປງຫລືບໍ່ປ່ຽນແປງ, ແລະ ຖ້າມີການປ່ຽນແປງແລ້ວ, ການປ່ຽນແປງເຫຼົ່ານີ້ເປັນຄືແນວໃດ ແລະ ດຳເນີນໄປຢ່າງໃດ. ການຕອບຕໍ່ຄວາມຖາມສຸດ ທາຍເຫລົ່ານີ້ ປະກອບເປັນພື້ນຖານທິດສະດີຂອງແບບວິທີ. ຖ້າຫາກໂລກມີ ການປ່ຽນແປງ, ມີການຂະຫຍາຍຕົວ, ແລະ ທຸກໆປະກົດການນອນຢູ່ໃນການ ພົວພັນເຊິ່ງກັນແລະກັນ ແລະ ກະທົບເຊິ່ງກັນແລະກັນແລ້ວ, ແມ່ນວ່າຄວນລົງ ມືເອົາການຄົ້ນຄວ້າເຫດການດັ່ງກ່າວ ຄືກັນກັບຄົ້ນຄວ້າເຫດການທີ່ມີການ ປ່ຽນແປງ ແລະ ຂະຫຍາຍຕົວ, ທີ່ຄົງຕົວຢູ່ໃນຕາໜ່າງແຫ່ງການພົວພັນ ແລະຂັດແຍ່ງກັນ. ແບບວິທີສົດຈະວິພາກ ຍຶດຖືທັດສະນະດັ່ງນີ້ເອງ. ເນື່ອງຈາກ ວ່າທັດສະນະດັ່ງນີ້ ສອດຄ່ອງກັບສະພາບການພາວະວິໄສຂອງວັດຖຸ, ສະນັ້ນ ສົດຈະວິພາກຊຸກຍູ້ການຂະຫຍາຍຕົວຂອງວິທະຍາສາດ, ຊຸກຍູ້ການຮັບຮູ້ຢ່າງມີຜົນດີ, ມັນມີລັກສະນະປະຕິວັດ ເພາະໄດ້ຊີ້ແຈງໃຫ້ເຫັນວ່າ ການພົວພັນທາງສັງຄົມທີ່ຫລ້າຫລັງແລ້ວນັ້ນ ສາມາດປ່ຽນແທນດ້ວຍການພົວພັນແບບໃໝ່ທີ່ກ້າວ - ໜ້າ.

ສ່ວນແບບວິທີ ອະພິທຳ ບໍ່ເຫັນການຂະຫຍາຍຕົວຂອງການດຳລົງຄົງ ຕົວຢ່າງແທ້ຈິງ ແລະ ໃນຕົວຈິງແລ້ວ ປະຕິເສດການຂະຫຍາຍຕົວນີ້ ບໍ່ຮັບຮູ້ການປ່ຽນແປງດ້ານຄຸນນະພາບຢ່າງສົມເຊິ່ງ ຕະຫລອດທັງຂໍ້ຂັດແຍ່ງ, ຕີລາຄາ ຕໍ່ຄວາມໝາຍຂອງການພົວພັນນັ້ນ ບໍ່ໄດ້ຕາມທີ່ຄວນ. ດ້ວຍເຫດນັ້ນ ໃນການຄົ້ນຄວ້າບັນດາປະກົດການແບບວິທີອະພິທຳ ຈຶ່ງເລີ່ມຈາກການບໍ່ປ່ຽນແປງດ້ານຄຸນນະພາບຂອງວັດຖຸ, ໝາຍເຖິງການບໍ່ປ່ຽນແປງຂອງກະໂຕວັດຖຸນັ້ນເອງ, ພຽງແຕ່ຄຳນວນການປ່ຽນແປງ ດ້ານປະລິມານ, ບໍ່ວາງທິດທາງໄຈແຍກການພົວພັນ ແລະ ຄວາມຂັດແຍ່ງ. ທັດສະນະເຊັ່ນນີ້ ທ່ວງດຶງການຂະຫຍາຍ ຕົວຂອງວິທະຍາສາດ ແລະ ຕອບສະໜອງຜົນປະໂຫຍດຂອງຊົນຊັ້ນເປັນເຈົ້າ ຢູ່ໃນສັງຄົມທີ່ມີການຂູດຮີດ, ເຊິ່ງເປັນຊົນຊັ້ນທີ່ພະຍາຍາມວາດພາບແບບ ແຜນດຳລົງຊີວິດທີ່ມີຢູ່ນັ້ນ ໃຫ້ເປັນແບບແຜນທີ່ບໍ່ປ່ຽນແປງ ແລະ ໝັ້ນຄົງຖາວອນ.

## ໓. ຈຸດພິເສດຂອງປັດຊະຍາ ມາກ-ເລນິນ, ທີ່ຕັ້ງຂອງມັນໃນທ່າມກາງວິທະຍາສາດອື່ນໆ

ປັດຊະຍາ ມາກ ແມ່ນວັດຖຸນິຍົມສັດຈະວິພາກແລະປະຫວັດວິພາກ, ພ້ອມກັນກັບ ເສດຖະສາດການເມືອງ ແລະ ລັດທິກອມມູນິດວິທະຍາສາດແມ່ນສ່ວນປະກອບຂອງລັດທິມາກ ແລະ ປັດຊະຍານີ້ ເກີດຂຶ້ນມາພ້ອມໆກັນກັບ ສອງພາກສ່ວນດັ່ງກ່າວ. ລັດທິມາກ ໄດ້ເລີ່ມຕົ້ນກໍ່ຕັ້ງຂຶ້ນໃນຊຸມປີ ໔໐ ຂອງສະຕະວັດທີ ໑໙ ຢູ່ເຢຍລະມັນ. ຜູ້ສ້າງຕັ້ງລັດທິນີ້ ແມ່ນ ກ.ມາກ ແລະ ຟ. ອັງແກນ. ລັດທິມາກເກີດຂຶ້ນມາກໍ່ເນື່ອງຈາກວ່າໄດ້ມີການຂະຫຍາຍຕົວຂອງ ຊີວິດທາງດ້ານ ສັງຄົມ, ການຕໍ່ສູ້ຊົນຊັ້ນ, ວິທະຍາສາດແລະປັດຊະຍາ. ເຖິງເວລານັ້ນໄດ້ເກີດມີປະຖົມປັດໄຈທາງທິດສະດີດ້ານເສດຖະກິດ ແລະ ສັງຄົມສຳລັບລັດທິມາກ.

ໃນຈຳນວນປະຖົມປັດໄຈດ້ານເສດຖະກິດ ແລະ ສັງຄົມນັ້ນມີການ ຂະຫຍາຍຕົວຂອງທຶນນິຍົມ, ການປະກົດຕົວ ແລະ ສ້າງຕັ້ງຊົນຊັ້ນໃໝ່ຄື ຊົນຊັ້ນກຳມາຊີບ ເຊິ່ງການປະກົດຕົວບົນເວທີປະຫວັດສາດໄດ້ຂີດໝາຍດ້ວຍບັນຮົບຕໍ່ສູ້ຊົນຊັ້ນ ຫລາຍບັນໃນບັນດາປະເທດທະວີບເອີຣົບ (ການລຸກຮື້ຂຶ້ນທີ່ ລີອົງ ໃນປີ ໑໘໓໑ ແລະ ປີ ໑໘໓໔ຢູ່ຝະລັ່ງ; ຂະບວນການຊາກຕິສ ໃນຊຸມປີ ໓໐-໔໐ ສະຕະວັດທີ ໑໙ ຢູ່ອັງກິດ, ການລຸກຮື້ຂຶ້ນຂອງຊາວກຳມະກອນ ຕ່ຳແຜ່ນ ຊີເລັດ ປີ ໑໘໔໔ ຢູ່ເຢຍລະມັນ). ເຫດຜົນຕົ້ນຕໍ ແລະ ໂດຍກົງ ທີ່ພາໃຫ້ເກີດມີລັດທິມາກນັ້ນ ແມ່ນການປະກົດຕົວຂອງຊົນຊັ້ນກຳມາຊີບແລະການສ້າງຕັ້ງຈິດສຳນຶກ, ໂລກະທັດໃໝ່ ຂອງຊົນຊັ້ນດັ່ງກ່າວ. ລັດທິມາກແມ່ນຕົວແທນດ້ານທິດສະດີໃຫ້ແກ່ຖານະພາວະວິໄສ, ຜົນປະໂຫຍດໃນດ້ານ ຮາກຖານ ແລະ ໜ້າທີ່ປະຫວັດສາດຂອງຊົນຊັ້ນກຳມະກອນ. ກ.ມາກ ແລະ ຟ. ອັງແກນ ໄດ້ກາຍເປັນຜູ້ນຳ ແລະ ນັກທິດສະດີຂອງຊົນຊັ້ນກຳມະກອນ, ທ່ານທັງສອງໄດ້ເຂົ້າໃຈບົດບາດປະຫວັດສາດອັນຍິ່ງໃຫຍ່ ຂອງຊົນຊັ້ນ ດັ່ງກ່າວ, ເຊິ່ງເປັນກຳລັງປະຕິວັດ ທີ່ກ້າວໜ້າຢ່າງສະເໝີຕົ້ນສະເໝີປາຍແລະ ຢ່າງພາວະວິໄສ.

ໃນຈຳນວນປະຖົມ ປັດໄຈທາງທິດສະດີນັ້ນ ມີການພັດທະນາຄວາມຮູ້ທາງ

ດ້ານທຳມະຊາດ ແລະ ໂດຍສະເພາະແມ່ນບັນດາການຄົ້ນພົບທີ່ຍິ່ງໃຫຍ່ ໃນວິ
ທະຍາສາດທຳມະຊາດ ເຊັ່ນການວາງພື້ນຖານກົດເກນຮັກສາວັດຖຸ ແລະ ພະ
ລັງງານໃຫ້ຄົງເດີມ, ການຄົ້ນພົບວ່າ ອົງຄະທາດປະກອບດ້ວຍຈຸລັງ, ການ
ສ້າງ ຕັ້ງທິດສະດີຂອງ ດາວິນ ກ່ຽວກັບວິວັດທະນາການ. ກົກເຫງົ້າຂອງລັດ
ທິມາກໃນດ້ານແນວຄິດສັງຄົມນັ້ນ ແມ່ນເສດຖະສາດການເມືອງ ຂອງອັງກິດ
ເຊິ່ງມີຜົນງານຂອງ ອາ.ສະມິດ ແລະ ດ. ຣິກາກໂດ ເປັນ ຕົວແທນ, ລັດ
ທິສັງຄົມນິຍົມແບບໄຝ່ຝັນ (ອາ.ແຊງ-ຊີມົງ, ຊ.ຟູຣິເອ, ຣ.ໂອແວນ ) ,
ປັດຊະຍາ ກລາຊິກ ຂອງເຢຍລະມັນ (ວັດຖຸນິຍົມຂອງ ລ.ເຟເຢບາກ ແລະ
ສັດຈະວິພາກຂອງ ກ.ເຮເກນ). ລັດທິມາກ ບໍ່ແມ່ນເກີດຂຶ້ນໂດຍຫລີກ ເວັ້ນ
ຈາກເສັ້ນທາງຕົ້ນຕໍແຫ່ງການຂະຫຍາຍຕົວຂອງອາລະຍະທຳຂອງໂລກ, ແຕ່-
ແມ່ນການສືບຕໍ່ຂອງບັນດາກະແສແນວຄິດສັງຄົມ ທີ່ສຳຄັນທີ່ສຸດໃນອະດີດ. ແຕ່
ອັນນັ້ນບໍ່ແມ່ນການສືບຕໍ່ທີ່ງ່າຍດາຍ, ແຕ່ແມ່ນການຫັນປ່ຽນປະຕິວັດທີ່ຍິ່ງໃຫຍ່ ທີ່
ໄດ້ສັງລວມເອົາສິ່ງຍອດແຍ້ທີ່ມີລັກສະນະ ວິທະຍາສາດ, ກ້າວຫນ້າຢ່າງແທ້
ຈິງ ຈາກບັນດາທິດສະດີຂອງອະດີດ, ແລະ ປະຕິເສດທຸກສິ່ງທີ່ຫລ້າສະໄຫມ,
ທີ່ບໍ່ມີວິທະຍາສາດ, ແລະ ມີລັກສະນະຮັກສາຮີດເດີມ. ກ.ມາກ ແລະ ຟ .
ອັງແກນ ໄດ້ຮື້ນຕອງຄືນໃຫມ່ຢ່າງລະອຽດ ແລະ ໄດ້ສັງລວມການຂະຫຍາຍ-
ຕົວຂອງຊີວິດສັງຄົມ, ການຕໍ່ສູ້ຊົນຊັ້ນຂອງຊົນຊັ້ນກຳມາຊີບ, ຜົນຂອງການຂະ
ຫຍາຍຕົວຂອງບັນດາວິທະຍາສາດ ແລະ ບົນພື້ນຖານອັນນີ້ ໄດ້ກໍ່ຕັ້ງໂລກະທັດ
ໃຫມ່.

ປັດຊະຍາກ່ອນສະໄຫມລັດທິມາກ ບໍ່ແມ່ນປັດຊະຍາແບບວິທະຍາສາດຢ່າງ
ສົມບູນ. ແມ່ນກະທັ້ງວັດຖຸນິຍົມ ກໍ່ຍັງມີຂໍ້ຈຳກັດບົກພ່ອງດ້ານປະຫວັດສາດແລະ
ຊົນຊັ້ນຫລາຍຂໍ້, ໃນນັ້ນມັນມີລັກສະນະອະພິທຳ. ຕົວຢ່າງປັດຊະຍາຂອງ ລ.
ເຟເຢບາກ ຍັງເປັນແບບອະພິທຳ, ເຂົາບໍ່ເຂົ້າໃຈຄວາມຫມາຍຂອງສັດຈະວິ
ພາກ. ມາກ ແລະ ອັງແກນໄດ້ອີງໃສ່ສິ່ງພື້ນຖານໃນປັດຊະຍາ ເຟເຢບາກ-
ນັ້ນຄືວັດຖຸນິຍົມ. ທັງສອງໄດ້ເສີມຂະຫຍາຍວັດຖຸນິຍົມ ແລະ ໄດ້ແກ້ໄຂ ຂໍ້ບົກ
ພ່ອງຂອງວັດຖຸນິຍົມດັ່ງກ່າວນີ້. ປັດຊະຍາຂອງເຮເກນ ມີເນື້ອໃນທີ່ມີຄຸນຄ່າຄື
ສັດຈະວິພາກ, ແຕ່ມັນກໍ່ມີຂໍ້ບົກພ່ອງທີ່ສຳຄັນ, ເຊິ່ງໃນນັ້ນພື້ນຖານຈິດຕະນິ
ຍົມຂອງມັນເປັນສິ່ງຕົ້ນຕໍ. ມາກ ແລະ ອັງແກນໄດ້ປະລະລັດທິຈິດຕະນິຍົມ -

ຂອງ ເຮເກນ ເສີມຂະຫຍາຍເນື້ອໃນທີ່ມີເຫດຜົນຂອງສັດຈະວິພາກຂອງເຂົາ ແລະ ໄດ້ນຳເອົາສັດຈະວິພາກເຂົ້າສູ່ພື້ນຖານຂອງລັດທິວັດຖຸນິຍົມ.

ປັດຊະຍາ ມາກ-ເລນິນ ມີຄວາມແຕກຕ່າງໃນດ້ານຄຸນນະພາບຈາກ ລະບົບປັດຊະຍາໃນເມື່ອກ່ອນ. ໄດ້ເກີດມີການປ່ຽນແປງໃນຄວາມເຂົ້າໃຈ ຕໍ່ປັດຊະຍາ ແລະ ຕໍ່ບົດບາດຂອງມັນ ໃນຊີວິດຂອງສັງຄົມ, ໃນການກ່ຽວພັນຂອງມັນກັບວິທະຍາສາດອື່ນໆ ແລະ ກະໂຕມັນເອງກໍ່ໄດ້ກາຍເປັນວິທະຍາສາດ ທີ່ແທ້ຈິງ ທີ່ອະທິບາຍກົດເກນຂະຫຍາຍຕົວຂອງຄວາມເປັນຈິງ ແລະ ການຮັບຮູ້ຄວາມເປັນຈິງດັ່ງກ່າວ. ປັດຊະຍາ ຄົ້ນຄວ້າບັນຫາຕ່າງໆແບບວັດຖຸນິຍົມແລະສັດຈະວິພາກຢ່າງພ້ອມກັນ, ທັງສະແດງເຖິງຄວາມເປັນເອກະພາບແບບກາຍອິນຊີລະຫວ່າງວັດຖຸນິຍົມກັບສັດຈະວິພາກ. ດັ່ງນັ້ນ ລັດທິວັດຖຸນິຍົມໃນປັດຊະ-ຍາຈິ່ງມີລັກສະນະສັດຈະວິພາກ, ແລະ ສັດຈະວິພາກມີລັກສະນະວັດຖຸນິຍົມ,ມີພຽງແຕ່ໃນຄວາມເປັນເອກະພາບກັນກັບສັດຈະວິພາກເທົ່ານັ້ນ ລັດທິວັດຖຸນິຍົມຈິ່ງຈະກາຍເປັນສິ່ງທີ່ສະເໝີຕົ້ນສະເໝີປາຍ ແລະ ເລິກເຊິ່ງ, ພຽງແຕ່ໃນຄວາມເປັນເອກະພາບກັນກັບລັດທິວັດຖຸນິຍົມເທົ່ານັ້ນ ສັດຈະວິພາກຈິ່ງ ກາຍເປັນແບບວິທີຮັບຮູ້ແບບວິທະຍາສາດ ແລະ ແຮງກາຍຢ່າງແທ້ຈິງ.

ກ່ອນການກຳເນີດຂອງລັດທິມາກເຄີຍມີ (ແລະຈົນເຖິງປັດຈຸບັນນີ້ຍັງມີໃນຫລາຍຮູບການ) ທັດສະນະຕ່າງໆຕໍ່ການພົວພັນກັນລະຫວ່າງປັດຊະຍາກັບວິທະຍາສາດອື່ນໆ, ຕໍ່ບັນຫາທີ່ວ່າປັດຊະຍາຄວນຄົ້ນຄວ້າບັນຫາຫຍັງ ແລະ ຄວາມໝາຍຂອງມັນນັ້ນເປັນຄືແນວໃດ. ນັກແນວຄິດຈຳນວນໜຶ່ງຖືສຳຄັນບົດບາດ-ຂອງມັນ ແລະ ເຮັດໃຫ້ບົດບາດຂອງມັນເປັນສິ່ງເດັດຖານ ແລະ ເອີ້ນວ່າມັນເປັນ "ວິທະຍາສາດຂອງວິທະຍາສາດ", "ລາຊິນີແຫ່ງວິທະຍາສາດ",ໂດຍຖືວ່າມີພຽງແຕ່ປັດຊະຍາເທົ່ານັ້ນ ຈິ່ງສາມາດບັນລຸສັດຈະທຳ ອັນແທ້ຈິງໄດ້. ຕາມຄວາມເຫັນຂອງພວກເຂົາເຈົ້າແລ້ວ ບັນດາວິທະຍາສາດສະເພາະນັ້ນຂຶ້ນກັບປັດຊະຍາ, ເຮັດໃຫ້ໝາກຜົນຂອງມັນເປັນຈິງ, ປ້ອນຂໍ້ມູນໃຫ້ມັນ. ກົງກັນຂ້າມ ບັນດານັກແນວຄິດຜູ້ອື່ນໆຊ້ຳພັດຖືເບົາ ແລະ ຈົນກະທັ້ງປະຕິ ເສດຄວາມໝາຍຂອງປັດຊະຍາ. ພວກເຂົາເຈົ້າຖືວ່າ ທຸກໆຄວາມຮູ້ແບ່ງປັນ ໄປຕາມບັນດາວິທະຍາສາດ ແລະ ຄວາມຈຳເປັນຕ້ອງມີວິຊາປັດຊະຍາສະເພາະນັ້ນກໍ່ຕົກໄປ.

ກ.ມາກ, ຟ.ອັງແກລ ແລະ ວ.ອິ.ເລນິນ ໄດ້ຊີ້ແຈງໃຫ້ເຫັນ ລັກສະນະສະເພາະຂອງຄວາມຮູ້ດ້ານປັດຊະຍາ, ໄດ້ກຳນົດທີ່ຕັ້ງຂອງປັດຊະຍາທ່າມກາງບັນດາວິທະຍາສາດອື່ນ ແລະ ຄວາມໝາຍຂອງມັນ.

ລັດທິວັດຖຸນິຍົມສັດຈະວິພາກແມ່ນໜຶ່ງໃນຈຳນວນວິທະຍາສາດ. ມັນ ບໍ່ເຊື່ອມປົນເຂົ້າໃນວິທະຍາສາດອື່ນໆ ມີເປົ້າໝາຍການຄົ້ນຄວ້າສະເພາະຂອງຕົນ ແລະ ກໍບໍ່ຕັດຂາດຈາກວິທະຍາສາດອື່ນໆ. ໂດຍແຕກຕ່າງກັບບັນດາວິທະຍາສາດສະເພາະ ທີ່ເປີດເຜີຍໃຫ້ເຫັນເຖິງກົດເກນຂອງຂະແໜງ ຫລື ດ້ານໃດໜຶ່ງຂອງຄວາມເປັນຈິງນັ້ນແລ້ວ ລັດທິວັດຖຸນິຍົມສັດຈະວິພາກເປີດເຜີຍກົດເກນ, ຮູບການ ແລະ ລັກສະນະພິເສດຂອງການດຳລົງຄົງຕົວ ເຊິ່ງເປັນສິ່ງກວມລວມທີ່ມີຄວາມໝາຍສຳລັບທຸກໆຂົງເຂດ ແລະ ທຸກໆດ້ານຂອງຄວາມ -ເປັນຈິງ. ມັນຄົ້ນຄວ້າຮູບການທີ່ມີລັກສະນະລວມ ກວ່າໝູ່ຂອງການດຳລົງຄົງຕົວ, ຄົ້ນຄວ້າລັກສະນະພິເສດ ແລະ ຫລັກເກນຂອງການດຳລົງຄົງຕົວ ແລະ ຈິດສຳນຶກ, ຄົ້ນຄວ້າການກ່ຽວພັນກັນ ແລະ ການຂະຫຍາຍຕົວຂອງພວກມັນ. ວິທະຍາສາດຈຳນວນຫລາຍຄົ້ນຄວ້າການດຳລົງຄົງຕົວ,ວິທະຍາສາດອີກ ຈຳນວນໜຶ່ງ ຄົ້ນຄວ້າຈິດສຳນຶກ,ແຕ່ປັດຊະຍາແບບວິທະຍາສາດ ດຳເນີນ ການຄົ້ນຄວ້າໂດຍສະເພາະ ຄວາມກ່ຽວພັນກັນລະຫວ່າງການດຳລົງຄົງຕົວ ແລະ ຈິດສຳນຶກເວົ້າລວມ. ຈຸດພິເສດທີ່ສຳຄັນຂອງມັນຢູ່ບ່ອນນີ້ເອງ. ລັດທິວັດຖຸນິ-ຍົມສັດຈະວິພາກ ແມ່ນວິທະຍາສາດວ່າດ້ວຍກົດເກນຂະຫຍາຍຕົວຂອງ ທຳມະຊາດ, ສັງຄົມ ແລະ ການຮັບຮູ້ທີ່ມີລັກສະນະກວມລວມກວ່າໝູ່ ເຊິ່ງໄດ້ ຮັບການເປີດເຜີຍບົນພື້ນຖານການແກ້ໄຂບັນຫາຕົ້ນຕໍຂອງປັດຊະຍາແບບວັດຖຸນິຍົມ.

ລັດທິວັດຖຸນິຍົມສັດຈະວິພາກຄົ້ນຄວ້າດ້ານທີໜຶ່ງຂອງບັນຫາຕົ້ນຕໍຂອງ ປັດຊະຍາ ຄືວ່າອັນໃດມີມາກ່ອນ ລະຫວ່າງວັດຖຸ ຫລືຈິດສຳນຶກ, ຍັງຄົ້ນຄວ້າ -ດ້ານທີສອງຂອງມັນ ຄືວ່າດ້ວຍຄວາມອາດສາມາດຈະຮັບຮູ້ໂລກ. ມັນຄົ້ນຄວ້າທິດສະດີວ່າດ້ວຍວັດຖຸໃນຖານະເປັນຄວາມຈິງແບບພາວະວິໄສ ແລະ ຄົ້ນຄວ້າທິດສະດີວ່າດ້ວຍຈິດສຳນຶກໃນຖານະເປັນລັກສະນະສະເພາະຂອງວັດຖຸແລະຜົນຂອງການຂະຫຍາຍຕົວຂອງມັນ. ພ້ອມກັນນັ້ນ ລັດທິວັດຖຸນິຍົມສັດຈະວິພາກຍັງຄົ້ນຄວ້າກົດເກນການຮັບຮູ້ ແລະ ກົດເກນຈິນຕະນາການອັນເປັນຂັ້ນສູງສຸດ -ຂອງການຮັບຮູ້, ພິສູດຄວາມສາມາດຮັບຮູ້ໂລກ, ເຜີຍແບທາດແທ້ຂອງ ລັດທິ

ອະວິຊາ. ດັ່ງນັ້ນລັດທິວັດຖຸນິຍົມສັດຈະວິພາກ ກອມລວມທຸກໆຂົງເຂດ ຂອງຄວາມເປັນຈິງເຊັ່ນ ທຳມະຊາດ, ສັງຄົມ, ຄວາມຮັບຮູ້ ( ຈິນຕະນາການ ) ເຊິ່ງກົດເກນຕົ້ນຕໍຂອງມັນມີລັກສະນະທົ່ວໄປສຳລັບທຸກໆຂົງເຂດດັ່ງກ່າວ.ແລະຂົງເຂດເຫລົ່ານີ້ເຂວນອນຢູ່ໃຈກາງແຫ່ງຄວາມສົນໃຈຂອງປັດຊະຍາວິທະຍາ-ສາດ.

ລັດທິວັດຖຸນິຍົມສັດຈະວິພາກ ແມ່ນລະບົບທິດສະດີທີ່ສົມເຫດສົມຜົນ ມີໂຄງປະກອບ ແລະ ໂຄງຮ່າງຂອງຕົນ. ສ່ວນປະກອບພື້ນຖານຂອງລະບົບນີ້ ແມ່ນຫລັກການ, ກົດເກນ, ປະເພດ, ການສະຫລຸບຢ່າງມີແບບແຜນ. ຫລັກການລັດທິວັດຖຸນິຍົມສັດຈະວິພາກນັ້ນ ແມ່ນຫລັກທຳພື້ນຖານ, ແມ່ນຈຸດເລີ່ມຕົ້ນ.ໃນນັ້ນມີ ຫລັກການເອກະພາບຂອງໂລກ, ສາຍພົວພັນລວມ, ຫລັກການ ຂະຫຍາຍຕົວ. ໃນຈຳນວນກົດເກນມີ ກົດເກນວ່າດ້ວຍການດຳລົງຄົງຕົວ ມີມາກ່ອນຈິດສຳນຶກ, ກົດເກນວ່າດ້ວຍຄວາມເປັນເອກະພາບ ແລະ ການຕໍ່ສູ້ກັນລະຫວ່າງສິ່ງທີ່ປໍລະປັກກັນ, ກົດເກນວ່າດ້ວຍເຫດຜົນ. ປະເພດແມ່ນຄວາມຮັບຮູ້ພື້ນຖານດ້ານປັດຊະຍາເຊັ່ນ ວັດຖຸ, ຈິດສຳນຶກ,ຄຸນນະພາບ,ການປະຕິເສດ ແລະອື່ນໆ. ການລວບລວມບັນດາຂໍ້ສະຫລຸບຢ່າງມີແບບວິທີນັ້ນ ປະກອບເປັນແບບວິທີຮັບຮູ້ໂດຍສະເພາະ. ທຸກໆສ່ວນປະກອບຂອງລະບົບທິດສະດີລ້ວນແຕ່ມີການກ່ຽວພັນລະຫວ່າງກັນຢ່າງແນ່ນອນ ແລະ ປະກອບເປັນໂຄງ - ຮ່າງຂອງມັນ.

ທ່ານກາງການຄົ້ນຄວ້າທຸກສິ່ງທີ່ຄົງຕົວຢ່າງແທ້ຈິງນັ້ນ ປັດຊະຍາລັດທິມາກກອມລວມ ຄວາມເປັນຈິງດ້ານສັງຄົມ, ຊີວິດທາງສັງຄົມທີ່ສະແດງຕົວເປັນຮູບການສູງສຸດຂອງການເຄື່ອນເໜັງຂອງວັດຖຸ, ທັງຄົ້ນຄວ້າ (ຢ່າງລະອຽດ - ແລະ ຮອບດ້ານ) ຄວາມຮັບຮູ້ແບບວັດ ຖຸນິຍົມກ່ຽວກັບຊີວິດຂອງສັງຄົມ ກໍຄື-ລັດທິວັດຖຸນິຍົມປະຫວັດສາດ. ລັດທິວັດຖຸນິຍົມສັດຈະວິພາກ ແລະ ປະຫວັດສາດແມ່ນປັດຊະຍາເອກະພາບ, ເຊິ່ງໃນນັ້ນ ລັດທິວັດຖຸນິຍົມປະຫວັດສາດບໍ່ ອາດເປັນໄປໄດ້ ຖ້າຂາດລັດທິວັດຖຸນິຍົມສັດຈະວິພາກ ແລະ ລັດທິວັດຖຸນິຍົມສັດຈະວິພາກກໍບໍ່ອາດເປັນໄປໄດ້ ຖ້າຂາດລັດທິວັດຖຸນິຍົມປະຫວັດສາດ.

## ៤. ລັກສະນະພັກ, ລັກສະນະປະດິດສ້າງແລະຄວາມໝາຍຂອງປັດຊະຍາມາກ-ເລນິນ

ປັດຊະຍາໃດໆ ລ້ວນແຕ່ມີລັກສະນະຊົນຊັ້ນ, ລັກສະນະພັກ. ປັດຊະຍາມາກ-ເລນິນ ສະແດງເຖິງ ແລະ ປົກປັກຮັກສາຜົນປະໂຫຍດຂອງຊົນຊັ້ນ ກຳມະກອນ ແລະ ຊາວຜູ້ອອກແຮງງານໝົດທຸກຄົນ, ເສີມຂະຫຍາຍທິດທາງວັດຖຸນິຍົມຢ່າງເປັນລຳດັບ, ນຳໃຊ້ມັນເຂົ້າໃນການແກ້ໄຂບັນຫາຕົວຈິງ, ເປີດແບທາດແທ້ຂອງລັດທິຈິດຕະນິຍົມ. ລັກສະນະພັກຂອງມັນ ທັດສະນະຊົນຊັ້ນ ຕໍ່ການຕີລາຄາປະກົດການຕ່າງໆຂອງຊີວິດ ແລະ ວິທະຍາສາດນັ້ນ ກົງກັບ ທັດສະນະແບບພາວະວິໄສ, ກັບລັກສະນະວິທະຍາສາດ. ອັນນີ້ເນື່ອງຈາກ ວ່າ ຊົນຊັ້ນກຳມາຊີບ ແມ່ນຊົນຊັ້ນພິເສດ ທີ່ມີລັກສະນະປະຕິວັດຢ່າງສຸດກູ່ ສຸດປາຍ, ຜົນປະໂຫຍດຂອງເຂົາເຈົ້າຕອບສະໜອງບາດກ້າວລວມ, ທາງອຽງ ແລະ ກົດເກນຂອງການຂະຫຍາຍຕົວຂອງສັງຄົມ, ທັງຕອບສະໜອງຜົນປະໂຫຍດຂອງຊາວຜູ້ອອກແຮງງານໝົດທຸກຄົນ. ໃນຖານະເປັນຊົນຊັ້ນ ທີ່ກ້າວໜ້າຂອງຊາວຜູ້ອອກແຮງງານ ເຂົາເຈົ້າມີຄວາມສົນໃຈໃນການໄຈແຍກທາດແທ້ຂອງຂະບວນວິວັດ, ກົດເກນຂອງທຳມະຊາດ ແລະ ສັງຄົມ, ເຂົາເຈົ້າບໍ່ມີຂໍຈຳກັດທາງດ້ານຊົນຊັ້ນໃນການຮັບຮູ້.

ໃນ ຈຸດນີ້ລັກສະນະພັກຂອງລັດທິມາກ ກັບລັກສະນະພັກຂອງປັດຊະຍາຕະຫລອດທັງລະບົບແນວຄິດຂອງນາຍທຶນແຕກຕ່າງກັນຢ່າງຂາດຕົວ. ລັກສະນະພັກຂອງນາຍທຶນ ເປັນແບບເຫັນແກ່ຕົວ ມັນເບິ່ງປະກົດ ການຕ່າງໆແລະຕີລາຄາປະກົດ ການເຫລົ່ານີ້ແບບອັດຕະວິໄສ, ສະນັ້ນ, ມັນບໍ່ມີລັກສະນະວິທະຍາສາດ, ບໍ່ມີລັກສະນະພາວະວິໄສ. ອັນນີ້ມັນເນື່ອງຈາກວ່າ ຜົນປະ ໂຫຍດຂອງຊົນຊັ້ນກົດຂີ່ຂູດຮີດນັ້ນຝືນກັບຜົນປະໂຫຍດຂອງຊາວຜູ້ອອກແຮງງານ ແລະ ຝືນກັບບາດກ້າວປະຫວັດສາດ. ຮັບຮູ້ລັກສະນະພັກຂອງລະບົບແນວຄິດຂອງຕົນໃນສະພາບການດັ່ງນີ້ໝາຍຄວາມວ່າເຜີຍແບທາດແທ້ ຂອງຕົນຢ່າງໝົດກ້ຽງ. ດ້ວຍເຫດນັ້ນ ບັນດານັກແນວຄິດນາຍທຶນຈຶ່ງປິດບັງລັກສະນະພັກຂອງຕົນ ປະຕິເສດລັກສະນະພັກຂອງປັດຊະຍາເວົ້າລວມ. ພວກເຂົາເຈົ້າບໍ່ພຽງແຕ່ ບໍ່ມີຄວາມສາມາດຈະຮັບຮູ້ກົດເກນຂອງສັງຄົມ ແຕ່ຍັງປະຕິເສດການຄົງຕົວ ຂອງ

ບັນດາກົດເກນໃດໜຶ່ງ ໃນການຂະຫຍາຍຕົວຂອງສັງຄົມ ເພາະວ່າ ກົດເກນດັ່ງກ່າວ ໄດ້ຄາດຄະເນການດັບສູນຂອງລັດທິທຶນນິຍົມ ຂອງພວກນາຍທຶນ.

ໂດຍເຕີບໃຫຍ່ຂະຫຍາຍຕົວໄປພ້ອມໆກັນກັບຊີວິດ ປັດຊະຍາມາກ-ເລນິນ ໄດ້ຮັບການປັບປຸງເພີ່ມຕື່ມຢ່າງເປັນປະຈຳ ໂດຍສັງລວມພາກປະຕິບັດ ຕົວຈິງຂອງການຕໍ່ສູ້ປະຕິວັດ ຂອງການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມແລະດ້ວຍເຫດນີ້ຈຶ່ງມີລັກສະນະປະດິດສ້າງ. ມັນບໍ່ຮັບຮູ້ຄຳພີຕາຍຕົວ ແລະ ເຮັດໃຫ້ຂໍ້ວິນິດໄສທາງດ້ານທິດສະດີທົ່ວໆ ໄປອຸດົມຮັ່ງມີດ້ວຍການວິເຄາະ ໄຈ້ແຍກເງື່ອນໄຂພາວະວິໄສຕົວຈິງ ທີ່ປ່ຽນແປງແລວັນນັ້ນຢູ່ເລື້ອຍໆ, ແກ້ໄຂບັນຫາ ທີ່ເກີດຂຶ້ນມານັ້ນດ້ວຍວິທີໃໝ່. ດັ່ງນັ້ນກົກເຫງົ້າແຫ່ງການຂະຫຍາຍຕົວແບບປະດິດສ້າງຂອງມັນຈຶ່ງແມ່ນການຕິດພັນຢ່າງແໜ້ນແຟ້ນ ກັບຊີວິດ ແລະ ການຍຶດຖືເອົາສັດຈະວິພາກປະຕິວັດມາເປັນຫລັກ.

ລັດທິວັດຖຸນິຍົມສັດຈະວິພາກ ແລະ ປະຫວັດສາດສ້າງຕັ້ງຫລັກການ ພື້ນຖານຂອງໂລກະທັດກອມມູນິດນິຍົມ, ປະກອບພື້ນຖານດ້ານທິດສະດີ ແລະແບບວິທີຂອງນະໂຍບາຍການເມືອງ, ຍຸດທະສາດ ແລະ ຍຸດໂທບາຍຂອງບັນດາ-ພັກກອມມູນິດ, ການນຳພາສັງຄົມແບບວິທະຍາສາດ, ການຄຸ້ມຄອງເຫດການໃນ ສັງຄົມ. ທິດສະດີນີ້ຊີ້ແຈງໃຫ້ເຫັນຄວາມຈຳເປັນຢ່າງພາວະວິໄສ ແລະ ການຫລີກລ່ຽງບໍ່ໄດ້ຂອງການປະຕິວັດ ສັງຄົມນິຍົມ ຂອງໄຊຊະນະຂອງ ລັດທິສັງຄົມນິຍົມ ແລະ ກອມມູນິດນິຍົມ, ມັນຊຸກຍູ້ການກໍ່ສ້າງໂລກະທັດແບບ ວິທະຍາສາດໃຫ້ແກ່ຊາວຜູ້ອອກແຮງງານໝົດທຸກຄົນ, ຊ່ວຍເຫລືອພວກເຂົາ ເຈົ້າໃນການຕໍ່ສູ້ເພື່ອສັງຄົມໃໝ່. ມັນຊ່ວຍໃຫ້ເຂົ້າໃຈຢ່າງຖືກຕ້ອງຂະບວນວິວັດ, ປະກົດການ ແລະເຫດການຊີວິດພາຍໃນ ແລະ ຕ່າງປະເທດ, ເປັນອາວຸດ-ສຳລັບຊາວຜູ້ອອກແຮງງານ ໃນການຕໍ່ສູ້ກັບແນວຄິດນາຍທຶນ ແລະເສດເຫລືອຂອງສະໄໝກ່ອນ, ສິດສອນໃຫ້ພວກເຂົາເຈົ້າແກ້ໄຂຂໍ້ຂັດແຍ່ງຕ່າງໆ.

ການຄົ້ນຄວ້າປັດຊະຍາ ມາກ-ເລນິນ ກໍ່ສ້າງຈິນຕະນາການສັດຈະວິພາກອັນຖືກຕ້ອງ, ເປີດກວ້າງຄວາມຮູ້ທົ່ວໄປ, ສິດສອນທັດສະນະແບບປະດິດສ້າງຕໍ່ການແກ້ບັນຫາວິທະຍາສາດ ແລະ ຕົວຈິງ, ສິດສອນໃຫ້ເຫັນສິ່ງທີ່ສຳຄັນ , ເປັນທາດແທ້ ແລະ ໃໝ່, ໄຈ້ແຍກເຫດ ແລະ ຜົນຂອງເຫດການ, ຜ່ານຜ່າການຢຸດຢູ່ບ່ອນເກົ່າ ແລະ ຍຶດຖືແບບແຜນຕາຍຕົວ. ທຸກສິ່ງເຫລົ່ານີ້ລ້ວນ

ແລ້ວແຕ່ເປັນສິ່ງທີ່ຈຳເປັນສຳລັບນັກການເມືອງ, ນັກປາດ, ພະນັກງານຂອງພັກ, ນັກກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມທຸກໆຄົນ.

ລັດທິມາກ ແລະ ປັດຊະຍາຂອງມັນມີລັກສະນະສາກົນ, ຂໍ້ສະຫລຸບ ແລະ ຂໍ້ວິນິດໄສຂອງມັນມີມູນຄວາມຈິງສຳລັບທຸກໆປະເທດ ແລະ ປະຊາຊົນທັງຫມົດ ເຖິງແມ່ນວ່າໃນເງື່ອນໄຂທີ່ແຕກຕ່າງກັນ ມັນຕ້ອງຖືກຫມູນໃຊ້ໂດຍຄຳນຶງເຖິງຈຸດພິເສດອັນແນ່ນອນ.

ດັ່ງນັ້ນປັດຊະຍາ ມາກ-ເລນິນ ແມ່ນພື້ນຖານທິດສະດີລວມແຫ່ງການຮັບຮູ້ໂລກ ແລະ ການເຄື່ອນໄຫວຂອງຄົນເພື່ອດັດສ້າງໂລກ.

## ພາກທີ ສອງ

# ຄວາມເປັນເອກະພາບຂອງໂລກ ແລະ ລັກສະນະເປັນວັດຖຸຂອງມັນ

## ໑. ຄຳນິຍາມວັດຖຸ

ຢູ່ໃນໂລກບໍ່ມີຫຍັງທີ່ຈະບໍ່ແມ່ນວັດຖຸຫລືບໍ່ແມ່ນລັກສະນະສະເພາະຂອງມັນ. ສິ່ງວັດຖຸຈຳນວນຫລວງຫລາຍ ທີ່ປະກອບເປັນໂລກ, ລວມທັງກະໂຕ ຄົນເອງນັ້ນ ລ້ວນແລ້ວແຕ່ແມ່ນວັດຖຸທີ່ສະແດງຕົວອອກໃນຮູບແບບຂອງສິ່ງຂອງນັ້ນຫລືສິ່ງຂອງນີ້. ສິ່ງວັດຖຸທຸກຢ່າງລ້ວນແຕ່ມີການປ່ຽນແປງແບບນີ້ຫລືແບບນັ້ນ ໄປຕາມເວລາ, ຈຳນວນຫນຶ່ງສູນຫາຍໄປ, ອີກຈຳນວນຫນຶ່ງເກີດມີຂຶ້ນມາ, ແຕ່ບໍ່ມີສິ່ງໃດທີ່ຈະປະກົດຕົວຂຶ້ນມາຈາກບໍ່ມີຫຍັງ, ມັນເປັນເຊັ່ນດຽວກັນທີ່ວ່າ ບໍ່ມີສິ່ງໃດຈະສູນຫາຍໄປຢ່າງບໍ່ມີຮ່ອງຮອຍ ແລະ ກາຍເປັນບໍ່ມີຫຍັງ. ໃນເມື່ອ-ສິ່ງວັດຖຸຫນຶ່ງສູນຫາຍໄປແລ້ວ, ແມ່ນອັນນີ້ພຽງແຕ່ຫມາຍຄວາມວ່າ ມັນມີສິ່ງວັດຖຸໃຫມ່ໄດ້ກຳເນີດຂຶ້ນມາຈາກນັ້ນ ແລະສາມາດເປັນສິ່ງທີ່ສົມບູນກວ່າເກົ່າ. ການປ່ຽນແປງທຸກໆປະການທີ່ອາດຈະເປັນໄປໄດ້ເຫລົ່ານີ້ ລ້ວນແຕ່ດຳເນີນໃນກະໂຕວັດຖຸເອງ ແລະ ພວກມັນນອນຢູ່ໃນການປັ່ນປ່ຽນຈາກສິ່ງວັດຖຸຫນຶ່ງເປັນອີກສິ່ງວັດຖຸຫນຶ່ງ, ຫມາຍຄວາມວ່າໃນການຖ່າຍທອດຈາກຮູບແບບນີ້ ເປັນຮູບແບບໃຫມ່. ໃນການປ່ຽນແປງທຸກໆປະການວັດຖຸຍັງຮັກສາເປັນຕົນເອງຢູ່,ຮັກສາຄວາມຫມາຍລິເລີ່ມອັນເດັດຖານ ເນື່ອງຈາກວ່າບໍ່ແມ່ນພະເຈົ້າຫລືສິ່ງ ອື່ນໃດຫນຶ່ງເປັນຜູ້ໃຫ້ກຳເນີດມັນ, ຍາມໃດມັນກໍ່ຄົງຢູ່ຢ່າງຕະຫລອດການ ແລະບໍ່ມີວັນຈະສູນຫາຍໄປ ກາຍເປັນບໍ່ມີຫຍັງເລີຍ.

ສິ່ງວັດຖຸໃນໂລກຮອບຕົວເຮົານັ້ນ ແຕກຕ່າງກັນ; ຈຳນວນຫນຶ່ງໃຫຍ່ ອີກຈຳນວນກນຶ່ງນ້ອຍ; ຈຳນວນຫນຶ່ງເປັນທາດແຂງ, ອີກຈຳນວນຫນຶ່ງ ທາດແຫລວ ຫລືທາດອາຍ; ຈຳນວນກນຶ່ງແຫນ້ນ ອີກຈຳນວນຫນຶ່ງຜົງ.ຄວາມແຕກ

ຕ່າງກັນສາມາດເປັນທາງດ້ານສີ, ນ້ຳໜັກ, ລະດັບຄວາມສັບສົນ, ດ້ານທຳມະຊາດເປັນທາດມີຊີວິດຫລືເປັນທາດບໍ່ມີຊີວິດ ແລະ ທາງດ້ານລັກສະນະອື່ນໆອີກຫລາຍປະການ. ໃນແຕ່ລະສິ່ງວັດຖຸ ເມື່ອສັງເກດຢ່າງເອົາໃຈໃສ່ແລ້ວສາມາດຊອກເຫັນບັນດາລັກສະນະເດັ່ນຈຳນວນຫລວງຫລາຍ ທີ່ເປັນຂອງ ສະເພາະແຕ່ສິ່ງວັດຖຸດັ່ງກ່າວ ແລະ ບໍ່ພົບຢູ່ນຳສິ່ງວັດຖຸໃດໆອີກ. ຖ້າຫາກ ປິດເອົາໃບໄມ້ສອງໃບຈາກກົກໄມ້ຕົ້ນດຽວກັນແລ້ວ ຈະເຫັນວ່າຮູບແບບ, ສີສັນ, ນ້ຳໜັກ ແລະ ລາຍຂອງພວກມັນແຕກຕ່າງກັນ. ເປັນສິ່ງທຳມະດາທີ່ເກີດ ມີຄວາມຖາມວ່າ ສິ່ງວັດຖຸຕ່າງໆມີບັນດາລັກສະນະພິເສດ ຄືກັນ, ເປັນລັກສະນະລວມສຳລັບສິ່ງວັດຖຸເຫລົ່ານີ້ຫລືບໍ່ ?

ມີລັກສະນະພິເສດລວມດັ່ງນີ້. ມັນຢູ່ບ່ອນວ່າທຸກໆສິ່ງວັດຖຸຫລືປະກົດ ການທັງໝົດ ໂດຍບໍ່ມີການຫລີກເວັ້ນນັ້ນ ລ້ວນແຕ່ຄົງຕົວໂດຍບໍ່ຂຶ້ນກັບຈິດສຳນຶກ - ຂອງຄົນ, ບໍ່ຂຶ້ນກັບການທີ່ວ່າ ຄົນຈະຄົ້ນຄິດເຖິງມັນ ຫລືບໍ່, ຮັບຮູ້ (ຕົວຢ່າງ ເຫັນຫລືໄດ້ຍິນ) ມັນຫລືບໍ່ຮັບຮູ້ມັນກໍ່ຕາມ. ທຳມະຊາດໄດ້ຄົງຢູ່ມາກ່ອນ ການກຳເນີດຂອງຄົນທີ່ມີຈິດສຳນຶກ. ການຄົງຢູ່ຂອງສິ່ງວັດ ຖຸຫລືປະກົດການຢ່າງບໍ່ຂຶ້ນກັບຈິດສຳນຶກຂອງຄົນນັ້ນ ບັນດານັກປັດຊະຍາຮຽກເປັນ "ການຄົງຢູ່ ແບບພາວະວິໄສ" ຫລື "ການດຳລົງຄົງຕົວ", ຫລື "ຄວາມເປັນຈິງແບບພາວະວິໄສ". ບົນພື້ນຖານຄວາມຮັບຮູ້ "ການຄົງຢູ່ແບບພາວະວິໄສ" ໄດ້ມີການກໍ່ຕັ້ງຄວາມຮັບຮູ້ກ່ຽວກັບ "ວັດຖຸ" ຢ່າງຕັກກະຖານທີ່ໄດ້ກວມລວມເອົາທຸກໆປະກົດການ ເນື່ອງຈາກວ່າປະກົດການ ເຫລົ່ານີ້ມີລັກສະນະພິເສດທີ່ນອນຢູ່ ບົນພື້ນຖານຄວາມຮັບຮູ້ກ່ຽວກັບວັດຖຸ.

ຄົນຮັບຮູ້ການຄົງຢູ່ຂອງບັນດາປະກົດການ, ຮັບຮູ້ວ່າພວກມັນມີລັກສະນະພິເສດແຕກຕ່າງກັນນັ້ນ ກ່ອນອື່ນ ໝົດແມ່ນຍ້ອນມີຄວາມຮູ້ສຶກເຊິ່ງເປັນຈຸດເລີ່ມ ແລະ ຮູບແບບເບື້ອງຕົ້ນຂອງຈິດສຳນຶກ. ຄວາມຮູ້ສຶກໄດ້ເກີດມີຂຶ້ນໃນເມື່ອສິ່ງວັດຖຸທີ່ຄົງຢູ່ໂດຍພາວະວິໄສໄດ້ກະທົບໃສ່ອະໄວຍະວະຄວາມຮູ້ສຶກຂອງຄົນ - (ເບິ່ງ, ຟັງ, ສຳຜັດ, ດົມ). ຜ່ານຄວາມຮູ້ສຶກ ຄົນເຮົາໄດ້ແຍກສິ່ງວັດ ຖຸຕ່າງໆ (ຕົວຢ່າງ ເຫັນຄວາມແຕກຕ່າງກັນລະຫວ່າງ ໝາກກຽງແລະໝາກກ້ວຍ), ສັງເກດເຫັນບາງລັກສະນະສະເພາະຂອງສິ່ງວັດຖຸນັ້ນແມ່ນ ຄວາມແຂງ, ຄວາມສາມາດຢືດຫົດໄດ້, ຄວາມສາມາດປັ້ນຫລໍ່ໄດ້, ຊຸມທະ ພູມ

ແລະ ອື່ນໆ. ຄົນບໍ່ສາມາດຮູ້ສຶກຕໍ່ທຸກສິ່ງທຸກຢ່າງໂດຍກົງໄດ້,ມີການສິ່ງ ລັງສີປະເພດຕ່າງໆທີ່ອະໄວຍະວະຄວາມຮູ້ສຶກຂອງຄົນບໍ່ສາມາດຮັບໄດ້. ຄົນຍັງ ບໍ່ສາມາດຮູ້ສຶກຕໍ່ສິ່ງນ້ອຍໆ ເຊັ່ນ ໂປຣຕົງ, ເອເລັກຕົງ ແລະ ອື່ນໆອີກຫລາຍແນວ. ແຕ່ໃນກໍລະນີນີ້ຄົນເຮົາໃຊ້ ອຸປະກອນ ເພື່ອສາມາດຮູ້ສຶກສິ່ງທີ່ເຮົາບໍ່ຮັບຮູ້ໄດ້ໂດຍກົງ. ດັ່ງນີ້ ສາມາດສະຫລຸບໄດ້ວ່າ: ວັດຖຸທີ່ຄົງຢູ່ໃນຮູບຂອງສິ່ງວັດຖຸ ແລະ ປະກົດການຕ່າງໆນັ້ນ ຄົນສາມາດຮັບຮູ້ໄດ້ພຽງແຕ່ຜ່ານຄວາມ ຮູ້ສຶກເທົ່ານັ້ນ.

ວ.ອີ.ເລນິນ ໄດ້ໃຫ້ຄຳນິຍາມຕໍ່ວັດຖຸໃນບົດລັດທິວັດຖຸນິຍົມ ແລະ ລັດທິບົດຣຽນຕຳໜິວິພາກ. ເລນິນໄດ້ຂຽນວ່າ ວັດຖຸແມ່ນ "ສິ່ງທີ່ກະທົບຕໍ່ອະໄວຍະວະຄວາມຮູ້ສຶກຂອງພວກເຮົາ ພາໃຫ້ເກີດມີຄວາມຮູ້ສຶກ; ວັດຖຸແມ່ນຄວາມເປັນຈິງແບບພາວະວິໄສ ທີ່ເຮົາສາມາດຮູ້ສຶກໄດ້ "[໑].

ວ.ອີ.ເລນິນ ໄດ້ໃຫ້ຄຳນິຍາມແກ່ວັດຖຸໂດຍຜ່ານການກະທົບຂອງມັນຕໍ່ຈິດສຳນຶກເຊິ່ງມີຄວາມຮູ້ສຶກເປັນຮູບແບບເບື້ອງຕົ້ນ, ສິ່ງນີ້ອຳນວຍໃຫ້ໄຈແຍກ - ຢ່າງເລິກເຊິ່ງກ່ຽວກັບການແກ້ໄຂບັນຫາພື້ນຖານຂອງປັດຊະຍາຕາມແບບວັດຖຸນິຍົມ. ກ່ອນອື່ນໝົດ ວັດຖຸແມ່ນຄວາມເປັນຈິງຢ່າງພາວະວິໄສ, ໝາຍຄວາມວ່າ ມັນປະກອບເປັນຈຸດລິເລີ່ມເກີດກ່ອນ, ທີ່ຄົງຢູ່ໂດຍບໍ່ຂຶ້ນກັບ ຈິດສຳນຶກຂອງພວກເຮົາ. ທີສອງຈິດສຳນຶກແມ່ນສິ່ງເກີດລຸນ, ແມ່ນຜະລິດຕະ ພັນຂອງວັດຖຸ ແລະ ເປັນສິ່ງເກີດລຸນແລ້ວມັນຄົງຢູ່ໄດ້ພຽງແຕ່ຍ້ອນ ອະໄວຍະວະຄວາມຮູ້ສຶກໄດ້ຮັບການກະທົບຈາກສິ່ງວັດຖຸຕ່າງໆ ທີ່ສອງແສງ ອອກມາໃນ-ຄວາມຮູ້ສຶກໃນຂະນະທີ່ມັນເກີດມີຂຶ້ນມາ. ກົງກັນຂ້າມ ກັບຄວາມເຫັນຂອງບັນດານັກປັດຊະຍາອະວິຊາ ທີ່ໄດ້ຢືນຢັນຄວາມບໍ່ສາມາດຈະຮັບຮູ້ໂລກວັດຖຸ ນັ້ນ ວ.ອີ.ເລນິນ ໄດ້ຢັ້ງຢືນແນວຄິດກ່ຽວກັບຄວາມສາມາດຈະຮັບຮູ້ໂລກ.

ວັດຖຸບໍ່ແມ່ນບາງປະກົດການໃດໜຶ່ງ ຫລືກຸ່ມປະກົດການ, ແຕ່ແມ່ນທຸກ ໆ ປະກົດການເວົ້າລວມ. ຄຳນິຍາມວັດຖຸແບບ ເລນິນບໍ່ພຽງແຕ່ມີຄວາມໝາຍຕໍ່ບັນດາປະກົດການທີ່ໄດ້ຮູ້ກັນມາແລ້ວເທົ່ານັ້ນ,ແຕ່ຍັງມີຄວາມໝາຍຕໍ່ບັນດາປະ

---

໑) ວ.ອີ.ເລນິນ ນິພົນຄົບຊຸດ, ເຫລັ້ມທີ ໑໘, ໜ້າ ໑໔໙.

ກິດການທີ່ມະນຸດເຮົາຈະສາມາດຮຽນຮູ້ໄດ້ພຽງແຕ່ໃນອະນາຄົດພູ້ນອີກດ້ອຍ. ອາດຈະເປັນໄປໄດ້ ທີ່ວ່າລັກສະນະສະເພາະຂອງບັນດາປະກົດການທີ່ຈະໄດ້ ຮຽນຮູ້ໃນອະນາຄົດນັ້ນ ຈະເປັນລັກສະນະສະເພາະແບບບໍ່ທຳມະດາ, ແຕກ ຕ່າງກັນກັບລັກສະນະສະເພາະຂອງບັນດາສິ່ງວັດຖຸ ທີ່ພວກເຮົາໄດ້ຊິນເຄີຍມາ ແລ້ວໃນປະຈຸບັນນີ້ກໍຕາມ, ແຕ່ຄຳນິຍາມວັດຖຸຂອງ ວ.ອີ.ເລນິນ ຍັງຄົງ ຮັກ ສາລັກສະນະສັດຈະທຳຂອງມັນ, ເນື່ອງຈາກວ່າມັນຕິດພັນກັບການບໍ່ປ່ຽນແປງ ຂອງລັກສະນະສະເພາະລວມກວ່າໝູ່: ຄືແມ່ນຄວາມເປັນຈິງແບບພາວະວິໄສ ຄົງຢູ່ນອກຕົວ ແລະ ບໍ່ຂຶ້ນກັບຈິດສຳນຶກຂອງພວກເຮົາ ແລະຄົນຮັບເອົາ ມັນ ໂດຍຜ່ານຄວາມຮັບຮູ້. ຄຳນິຍາມນີ້ ບໍ່ຂຶ້ນກັບການປ່ຽນແປງໃນຄວາມ ຮັບຮູ້- ແບບວິທະຍາສາດກ່ຽວກັບວັດຖຸ, ກ່ຽວກັບໂຄງປະກອບຂອງສິ່ງວັດຖຸຕ່າງ ໆ. ມັນຮັກສາລັກສະນະສັດຈະທຳຂອງມັນຢ່າງຕະຫລອດການ.

ວິທະຍາສາດສະໄໝໃໝ່ຮູ້ຈັກວັດຖຸສອງປະເພດ ຄືສິ່ງວັດຖຸ ແລະ ທົ່ງ. ສິ່ງວັດຖຸ ແມ່ນລວມຍອດວັດຖຸທັງໝົດທີ່ມີນ້ຳໜັກສະຫງົບເຊິ່ງສາມາດຈະ ວັດ ແທກໄດ້ໃນເມື່ອວັດຖຸດັ່ງກ່າວຢູ່ໃນພາວະສະຫງົບ. ສິ່ງທີ່ເປັນແນວຊິນເຄີຍສຳ ລັບພວກເຮົາ, ລວມທັງພວກເຮົາເອງນັ້ນ, ແມ່ນສິ່ງວັດຖຸ, ທົ່ງແມ່ນການສົ່ງ ລັງສີປະເພດຕ່າງໆ (ແສງສະຫວ່າງ, ການສົ່ງກະແສວິທະຍຸ, ການສົ່ງລັງສີ ເຣິນແກນ), ທີ່ຮອບຮອມດ້ວຍຄວາມຮູ້ກ່ຽວກັບ "ທົ່ງໄຟຟ້າ-ແມ່ເຫລັກ ". ພ້ອມໆກັນກັບທົ່ງກະແສ ໄຟຟ້າ-ແມ່ເຫລັກແລ້ວ ຍັງມີທົ່ງປະເທດຕ່າງໆອີກ , ເຊັ່ນທົ່ງຄວາມດຶງດູດຂອງໂລກ, ທົ່ງກຳລັງນິວເຄລຍ ແລະ ອື່ນໆ. ການປະ ກອບເປັນທົ່ງບໍ່ນອນຢູ່ໃນພາວະສະຫງົບ, ເວລາໃດກໍ່ຢູ່ໃນການເຄື່ອນ ເໜັງ ແລະ ດ້ວຍເຫດນັ້ນ ຈຶ່ງບໍ່ມີນ້ຳໜັກສະຫງົບ.ເຖິງວ່າວິທະຍາສາດອາດ ສາ ມາດຈະຄົ້ນພົບປະເພດໃໝ່ຂອງວັດຖຸ ແຕ່ຄວາມຈິງທີ່ບໍ່ປ່ຽນແປງນັ້ນ ແມ່ນ - ຄວາມຮູ້ດ້ານປັດຊະຍາກ່ຽວກັບວັດຖຸໄດ້ກໍ່ຕັ້ງຂຶ້ນບົນລັກສະນະສະເພາະອັນດຽວ ຄືເປັນຄວາມເປັນຈິງແບບພາວະວິໄສ, ຄົງຢູ່ນອກຈິດສຳນຶກຂອງພວກເຮົາ.

## ໔. ຄວາມເປັນເອກະພາບດ້ານວັດຖຸຂອງໂລກ

ລັດທິວັດຖຸນິຍົມສັດຈະວິພາກ ເລີ່ມຈາກລັກສະນະມີມາກ່ອນຂອງວັດຖຸແລະລັກສະນະມີມາທີຫລັງ ແລະ ທີ່ເປັນຜະລິດຕະພັນຂອງຈິດສຳນຶກອັນເປັນລັກສະນະສະເພາະຂອງວັດຖຸ. ວັດຖຸມີມາກ່ອນນັ້ນ ຫມາຍເຖິງຄວາມເປັນອັນຫນຶ່ງ-ອັນດຽວຂອງວັດຖຸ-ນອກຈາກ ວັດຖຸແລ້ວບໍ່ມີສິ່ງໃດອີກ, ວັດຖຸກວມລວມ ເອົາທຸກສິ່ງທີ່ຄົງຢູ່. ຈາກຄວາມຮັບຮູ້ກ່ຽວກັບຄວາມເປັນອັນຫນຶ່ງອັນດຽວຂອງວັດຖຸແລ້ວເກີດມີແນວຄິດກ່ຽວກັບລັກສະນະຄົບຖ້ວນ ຂອງໂລກ. ກ່ຽວກັບຄວາມ - ເປັນເອກະພາບດ້ານວັດຖຸຂອງມັນ.

ດັ່ງ ຟ.ອັງແກນ ໄດ້ຊີ້ແຈງໃຫ້ເຫັນວ່າ ຫລັກຫມັ້ນຕໍ່ຄວາມເປັນເອກະ - ພາບດ້ານວັດຖຸຂອງໂລກນັ້ນ ສະຫລຸບມາຈາກທຸກໆຄວາມຮູ້ດ້ານປັດຊະຍາແລະບັນດາວິທະຍາສາດທຳມະຊາດ. ຄວາມຮັບຮູ້ແບບຈິດຕະນິຍົມກ່ຽວກັບ ຄວາມເປັນເອກະພາບດ້ານວັດຖຸຂອງໂລກ ທີ່ໄດ້ເກີດມາຈາກແນວຄິດເປັນອັນຫນຶ່ງ-ອັນດຽວຂອງຈິດສຳນຶກ ເຊິ່ງພວກຈິດຕະນິຍົມຖືວ່າເປັນສິ່ງມີມາກ່ອນ ແລະທຳມະຊາດແມ່ນຜະລິດຕະພັນຂອງຈິດສຳນຶກແມ່ນຄວາມຮັບຮູ້ແບບໄຮ້ສາລະ. ໃນບົດ "ອັງຕີ-ດູຣິງ" ຂອງຕົນ ຟ.ອັງແກນ ໄດ້ຕຳຫນິຄວາມຮັບຮູ້ແບບຈິດຕະ ນິຍົມຂອງດູຣິງ ກ່ຽວກັບຄວາມເປັນເອກະພາບຂອງໂລກ. ຕາມຄວາມ ເຫັນຂອງດູຣິງ* ແລ້ວ ຄວາມເປັນເອກະພາບຂອງໂລກເກີດມີຂຶ້ນມາ ເນື່ອງຈາກວ່າ ຈິດສຳນຶກມີຄວາມສາມາດກໍ່ຕັ້ງຄວາມຮູ້ທີ່ກວມລວມເອົາທຸກໆປະກົດ ການ ແລະ ຄວາມຮັບຮູ້ເຊັ່ນນີ້ແມ່ນຄວາມຮັບຮູ້ກ່ຽວກັບການດຳລົງຄົງຕົວ, ການຄົງຢູ່. ອັງແກນໄດ້ຊີ້ແຈງຄວາມຜິດ ສອງຂໍ້ໃນທິດສະດີ ດູຣິງ. ກ່ອນອື່ນ ຫມົດ ຈິດສຳນຶກບໍ່ສາມາດຈະກໍ່ຕັ້ງຄວາມເປັນເອກະພາບຂຶ້ນມາໄດ້, ມັນພຽງແຕ່ສາມາດສ່ອງແສງເຖິງຄວາມເປັນເອກະພາບລະຫວ່າງບັນດາປະກົດການ ທີ່ຄົງຢູ່ຢ່າງພາວະວິໄສ. ໂດຍບໍ່ຂຶ້ນກັບຈິດສຳນຶກ, ດັ່ງນັ້ນ ລະຫວ່າງທິດສະດີ ຂອງດູຣິງ ເຊິ່ງໄດ້ປັ້ນແຕ່ງຄວາມເປັນເອກະພາບຂອງໂລກຂຶ້ນມາຈາກຈິນຕະນາ-ການ ແລະ ທິດສະດີທາງສາສະຫນາ ທີ່ໄດ້ຢັ້ງຢືນວ່າ ຄວາມເປັນເອກະພາບ

* ດູຣິງ. (໑໘໓໓ - ໑໙໒໑) -ນັກປັດຊະຍາຊາວເຢຍລະມັນ.

ຂອງໂລກແມ່ນພົນງານຂອງພະເຈົ້ານັ້ນ ບໍ່ມີຄວາມແຕກຕ່າງກັນດ້ານຫລັກການແຕ່ປະການໃດເລີຍ. ຂໍ້ສອງ ໂລກຕ້ອງຄົງຢູ່ກ່ອນທີ່ຈະກາຍເປັນສິ່ງທີ່ ເອກະພາບ. ແຕ່ຄວາມເປັນເອກະພາບອັນແທ້ຈິງຂອງໂລກ ບໍ່ແມ່ນຢູ່ໃນການດຳລົງຄົງຢູ່ຂອງມັນ ຫາກຢູ່ໃນລັກສະນະເປັນວັດຖຸຂອງມັນ. ຄວາມເປັນເອກະພາບຂອງໂລກ ນອນຢູ່ໃນລັກສະນະເປັນວັດຖຸຂອງມັນ ນັ້ນຄືການຢັ້ງຢືນທີ່ສຳຄັນ - ຂອງ ຟ.ອັງແກນກ່ຽວກັບບັນຫານີ້.

ປັດຈຸບັນ ມາກ-ເລນິນ ແລະ ວິທະຍາສາດທຳມະຊາດເສີມຂະ ຫຍາຍຄວາມຮັບຮູ້ແບບວັດຖຸນິຍົມ ກ່ຽວກັບຄວາມເປັນເອກະພາບຂອງໂລກ. ໃນນັ້ນຄວນເຈາະຈົງສອງທັດສະນະ.

ຕີລາຄາຄວາມຮັບຮູ້ ທັດສະນະທີໜຶ່ງ ກ່ອນອື່ນໝົດຄວນສັງເກດວ່າ ຢູ່ໃນຈຳນວນເປົ້າໝາຍວັດຖຸທີ່ຫລວງຫລາຍ ຈົນບໍ່ອາດຄະນານັບໄດ້ ແລະແຕກຕ່າງກັນນັ້ນ ສາມາດຊອກເຫັນຈຸດຄ້າຍຄືກັນລະຫວ່າງພວກມັນຕາມການ ປະກອບຂອງມັນ, ຕາມບັນດາສ່ວນປະກອບເຊິ່ງພວກມັນຈະແຍກອອກຈາກກັນໃນເມື່ອມີການພັນແຍກ. ສິ່ງວັດຖຸທຸກແນວສາມາດແຍກອອກເປັນສ່ວນປະກອບ - ດ້ວຍວິທີໃດ ຫລືວິທີໜຶ່ງ ເພື່ອຈຸດປະສົງນີ້ ຕ້ອງໃຊ້ບາງວິທີ ແລະ ພາຫະນະພວກເຮົານຳໃຊ້ຄ້ອນຕີທັບກ້ອນຫີນ ໃຫ້ມັນເປັນກ້ອນນ້ອຍກວ່າເກົ່າ, ໃຊ້ມີດເຮົາສາມາດຝານໄມ້ໃຫ້ໄດ້ເປັນແຜ່ນບາງ. ແຕ່ຄວາມສາມາດຂອງພາຫະນະເຕັກນິກທຳມະດາທີ່ຄົນເຮົານຳໃຊ້ຢູ່ໃນຊີວິດປະຈຳວັນນັ້ນ ບໍ່ແມ່ນບໍ່ມີຂອບເຂດເວລາຈະມາເຖິງໃນເມື່ອມີຄວາມຈຳເປັນ ຕ້ອງໃຊ້ເຄື່ອງມື ທີ່ນັກປາດ ແລະນັກວິສະວະກອນໄດ້ປະດິດສ້າງຂຶ້ນມາ ເພື່ອພັນແຍກໃຫ້ໄດ້ມູນພາກທີ່ ນ້ອຍກວ່າຂອງສິ່ງວັດຖຸ. ເຄື່ອງມືເຫລົ່ານີ້ອຳນວຍໃຫ້ຕິດຕາມເບິ່ງໂມລະກູນ, ປະລະມານູຂອງສິ່ງວັດຖຸຕ່າງໆທີ່ຄົນເຮົາຮູ້ຈັກມາແລ້ວນັ້ນວ່າ ລ້ວນແຕ່ພັນແຍກ - ອອກມາຢ່າງເປັນລຳດັບ. ສຸດທ້າຍການພັນແຍກຈະໄດ້ພົບກັບສິ່ງທີ່ເອີ້ນກັນວ່າເປັນເມັດພື້ນຖານ(ອະນຸພາກ) ຄື ໂປຣຕົງ, ເອເລັກຕຣົງ ແລະ ອື່ນໆ. ວິທະຍາສາດທັນສະໄໝ ຍັງບໍ່ທັນພັນແຍກເມັດພື້ນຖານ ຫລື ຕິດຕາມ ການພັນແຍກນີ້ໃນເງື່ອນໄຂທຳມະຊາດໄດ້ເທື່ອ. ແຕ່ໃນຂະນະດຽວກັນນັ້ນ ມັນອຳນວຍໃຫ້ຕິດຕາມເບິ່ງການພັນປ່ຽນແຕ່ເມັດພື້ນຖານຊະນິດໜຶ່ງ ເປັນເມັດ ພື້ນຖານຊະນິດອື່ນນັ້ນຄືແນວໃດ, ຕິດຕາມເບິ່ງເມັດພື້ນຖານ ພັນປ່ຽນເປັນທົ່ງໄຟ

ຟ້າ-ແມ່ເຫລັກ (ການສົ່ງລັງສີ) ແລະ ທັງປະກອບເປັນເມັດພື້ນຖານ. ການພົນປ່ຽນຊຶ່ງກັນແລະກັນໃນທຳນອງນີ້ຊີ້ແຈງໃຫ້ເຫັນ ວ່າ ໃນດ້ານພື້ນຖານຂອງມັນແລ້ວ ບັນດາປະກົດການທີ່ພົນປ່ຽນໄປມາເຫລົ່ານີ້ ມີລັກສະນະ ຄ້າຍຄືກັນ, ເປັນອັນຫນຶ່ງອັນດຽວກັນ, ເປັນເອກະພາບນຳກັນ. ເນື່ອງຈາກວ່າ ເມັດພື້ນຖານປະກອບເປັນປະລະມານູ, ຈາກປະລະມານູ ເປັນໂມລະກູນ, ຈາກ ໂມລະກູນ ເປັນຜະຫລຶກ,ແລະ ໃນສຸດທ້າຍປະກອບເປັນສິ່ງວັດຖຸທຳມະດາທົ່ວໄປສຳລັບພວກເຮົາ, ລວມທັງຄົນເອງ, ສະນັ້ນມີເຫດຜົນທີ່ພວກເຮົາຈະ ຂະຫຍາຍແນວຄິດເອກະພາບນີ້ອອກໄປທົ່ວທັງໂລກແຫ່ງປະກົດການທາງວັດຖຸ.

ທັດສະນະທີສອງປະກອບຂຶ້ນມາຈາກຄວາມຮູ້ກ່ຽວກັບສາຍພົວພັນທົ່ວໄປລະຫວ່າງບັນດາປະກົດການຄື ສິ່ງວັດຖຸແຕ່ລະແນວ ມີການພົວພັນກັບສິ່ງວັດຖຸອື່ນໆ ຈຳນວນຫລວງຫລາຍ ຢ່າງບໍ່ອາດຄະນານັບໄດ້ ຍ່ອມມີການພົວພັນນີ້ ຈຶ່ງປະກອບເປັນຄວາມເປັນເອກະພາບ ແລະ ລັກສະນະຄົບຖ້ວນຂອງໂລກ, ໃນນັ້ນບົດບາດຕັດສິນໄດ້ແກ່ບັນດາກົດເກນທີ່ຄົງຢູ່ ຢ່າງພາວະວິໄສ. ສິ່ງວັດຖຸຕ່າງໆ ທັງຫມົດມີການພົວພັນລະຫວ່າງກັນ, ມີການກະທົບຊຶ່ງກັນແລະກັນ, ໃນ ນັ້ນການກະທົບຂອງສິ່ງວັດຖຸຫນຶ່ງ ຕໍ່ ສິ່ງວັດຖຸອື່ນນັ້ນ ອາດຈະເປັນການ ກະທົບໂດຍກົງ ກໍ່ຄືການກະທົບທາງອ້ອມ. ຫມາກບານສອງຫນ່ວຍກິ້ງໄປຫາກັນ ຢູ່ເທິງຫນ້າພຽງ ແລະ ຕຳກັນ ນັ້ນ ແມ່ນຕົວຢ່າງ ຂອງການກະທົບກັນໂດຍກົງ. ການດຶງດູດຊຶ່ງກັນແລະກັນ ລະຫວ່າງໂລກ ກັບ ສິ່ງວັດຖຸ ທີ່ຍົກຂຶ້ນເຫນືອຫນ້າດິນນັ້ນ ແມ່ນຕົວຢ່າງຂອງການກະທົບກັນໂດຍທາງອ້ອມ. (ເນື່ອງຈາກ ວ່າ ຫນ່ວຍໂລກມີນ້ຳຫນັກຢ່າງມະຫາສານ ທັງແຮງດຶງດູດຂອງມັນ ທັງນ້ຳຫນັກ - ຂອງສິ່ງວັດຖຸ ທີ່ຖືກຍົກຂຶ້ນເຫນືອຫນ້າດິນນັ້ນຫນ້ອຍຢູ່ແລ້ວ ຈຶ່ງບໍ່ແຮງດຶງ ດູດຂອງສິ່ງວັດຖຸຕໍ່ໂລກ ຍ່ອມວ່ານັ້ນຫນ້ອຍທີ່ສຸດ ແລະ ພຽງແຕ່ເວົ້າເຖິງແຮງດຶງດູດຂອງໂລກເທົ່ານັ້ນ). ການກະທົບຈາກຫນ່ວຍໂລກ ໄດ້ສົ່ງຜົນສະທ້ອນໂດຍກົງ ໄປຍັງທົ່ງທີ່ຢູ່ໃນກາງຫາວ ລະຫວ່າງຫນ້າດິນ ແລະ ສິ່ງວັດຖຸ ແລະຈາກທົ່ງແຫ່ງການກະທົບນັ້ນ ຈຶ່ງນຳການກະທົບໄປເຖິງສິ່ງວັດຖຸດັ່ງກ່າວ. ກ່ຽວກັບເລື່ອງທີ່ວ່າບໍ່ມີກາງຫາວ "ຫວ່າງເປົ່າ", ວ່າວັດຖຸເຕັມໄປທົ່ວກາງຫາວ ນັ້ນຢັ້ງຢືນດ້ວຍເຫດການຕົວຈິງທີ່ວ່າ ທຸກການກະທົບຊຶ່ງກັນແລະກັນ ລະຫວ່າງບັນດາສິ່ງວັດຖຸ ບໍ່ວ່າສິ່ງວັດຖຸ ທີ່ມີໂຄງປະກອບ, ມີຂະຫນາດຢ່າງໃດກໍ່ ຕາມ

ມັນບໍ່ແມ່ນຈະເກີດຂຶ້ນໃນທັນໃດໂລດ, ຫາກດຳເນີນໄປໃນຄວາມໄວອັນ ແນ່ນອນ, ທີ່ມີການຈຳກັດທາງດ້ານຂະຫນາດ. ມັນຢູ່ບ່ອນວ່າ ທຸກໆການກະທົບທີ່ເປົ້າຫມາຍວັດຖຸຖືກຮັບເອົານັ້ນ ລ້ວນແຕ່ນຳໄປເຖິງການປ່ຽນແປງໃນຕົວ ມັນເອງ ແລະ ທຸກໆການປ່ຽນແປງດຳເນີນໄປໃນໄລຍະເວລາອັນແນ່ນອນ, ເຖິງແມ່ນຈະເປັນໄລຍະທີ່ສັ້ນທີ່ສຸດກໍ່ຕາມ. ປະກົດການນ້ຳຂຶ້ນນ້ຳລົງຢູ່ແຄມຝັ່ງ ມະຫາສະຫມຸດ ຫລື ທະເລນັ້ນ ເກີດມີຂຶ້ນເນື່ອງຈາກແຮງດຶງດູດຂອງດວງເດືອນ ແລະ ໃນລະບົບຕ່ຳກວ່ານັ້ນ ເນື່ອງຈາກແຮງດຶງດູດຂອງດວງຕາເວັນ. ຖ້າຫາກສົມມຸດວ່າ ດວງເດືອນໄດ້ສູນເສຍເຄິ່ງຫນຶ່ງ ຂອງມວນສານຂອງມັນ ໄປໃນທັນໃດ ແນ່ນອນວ່າອັນນີ້ຈະໄດ້ສະແດງອອກໃນການລຶດຜ່ອນລະດັບນ້ຳຂຶ້ນແລະນ້ຳລົງຢູ່ເທິງໂລກຫລາຍເຕີບໂລດ ຄື ພຽງແຕ່ຫລັງຈາກຫນຶ່ງນາທີ. ເວລານີ້ເອງ ທີ່ຕ້ອງການເພື່ອໃຫ້ເກີດມີການປ່ຽນແປງໄລຍະຫ່າງລະຫວ່າງ ດວງເດືອນແລະຫນ່ວຍໂລກຂອງພວກເຮົາ. ສ່ວນຫວ່າງເປົ່າບໍ່ແມ່ນຫຍັງ ແລະໃນນັ້ນກໍ່ບໍ່ມີຫຍັງຈະປ່ຽນແປງ.

ຄວາມເປັນເອກະພາບດ້ານວັດຖຸຂອງໂລກ ນອນຢູ່ໃນພື້ນຖານ ແຫ່ງການຂະຫຍາຍຕົວ, ລວມທັງການຂ້າມຜ່ານຈາກສິ່ງທີ່ງ່າຍດາຍ ໄປເຖິງສິ່ງ ທີ່ສັບສົນ. ສິ່ງມີຊີວິດທຳອິດໄດ້ເກີດມີຂຶ້ນໃນໂລກ ຍ້ອນການເພີ່ມທະວີລະດັບຄວາມສັບສົນ ຂອງໂຄງປະກອບຂອງສິ່ງວັດຖຸ ທີ່ບໍ່ມີຊີວິດ ສ່ວນສິ່ງຄິດໄດ້ເກີດມີ ຂຶ້ນໃນເມື່ອຂະບວນວິວັດຂອງສິ່ງທີ່ມີຊີວິດໄດ້ສຳເລັດສົມບູນ ແລະ ສຸດທ້າຍໄດ້ນຳໄປເຖິງການກຳເນີດຂອງມະນຸດຂຶ້ນມາ. ຈິດສຳນຶກທີ່ຄົນເຮົາມີນັ້ນບໍ່ຢູ່ ນອກໂລກວັດຖຸ ມັນນອນຢູ່ໃນໂລກວັດຖຸ ເພາະມັນບໍ່ຄົງຢູ່ຕາມລຳພັງ, ຫາກແຕ່ຄົງຢູ່ພ້ອມກັບມັນສະຫມອງທີ່ເປັນວັດຖຸ ແລະ ມັນແມ່ນລັກສະເພາະຂອງມັນ ສະຫມອງ; ຖ້າຫາກມັນສະຫມອງຖືກພັງທະລາຍໄປແລ້ວ ລັກສະນະສະເພາະ - ຂອງມັນຄື ຈິດສຳນຶກນັ້ນ ກໍຈະສູນຫາຍໄປ.

ແນວຄິດແຫ່ງຄວາມເປັນເອກະພາບທາງວັດຖຸຂອງໂລກ ໄດ້ຮັບການຢັ້ງຢືນໃນວິທະຍາສາດ ທ່າມກາງການຕໍ່ສູ້ຢ່າງດຸເດືອດກັບ ທິດສະດີຈອມປອມທັງຫລາຍ, ເຊິ່ງຫລາຍປະການໃນນັ້ນ ຕິດພັນກັບສາສະຫນາ. ກ່ອນທີ່ ນິ ນິໂກລາຍ ໂກເປີກນິກ ນັກປາດຊາວໂປໂລຍຜູ້ຍິ່ງໃຫຍ່ ໄດ້ປະກາດທິດສະດີ ຂອງຕົນອອກມານັ້ນ ຖານະເປັນເຈົ້າ ໃນບັນດາທິດສະນະກ່ຽວກັບໂຄງປະກອບ -

ຂອງລະບົບຕາເວັນ ມີໃຫ້ແກ່ທິດສະດີ ປະໂຕເລເມ ທີ່ໄດ້ຮັບການສະຫນັບສະ
ຫນູນ ຈາກສາສະຫນາກາໂຕລິກ. ທິດສະດີນີ້ຢືນຢັນການຄົງຢູ່ ຂອງສອງໂລກ.
ໃນໂລກທີຫນຶ່ງມີຫນ່ວຍພິພົບ ແລະ ຄົນທີ່ຢູ່ເທິງນັ້ນ. ຫນ່ວຍພິພົບຕັ້ງຢູ່ໃຈກາງ
ຂອງລະບົບຈັກກະວານ ແລະ ດວງຕາເວັນ, ດວງເດືອນ ແລະ ດວງດາວທີ່
ຮູ້ກັນໃນສະໄຫມນັ້ນ ລ້ວນແຕ່ປິ່ນອ້ອມຫນ່ວຍພິພົບ. ໂລກທີສອງ ແມ່ນໂລກສະ
ຫວັນ ທີ່ປະກອບດ້ວຍດວງຕາເວັນ, ດວງເດືອນ ແລະ ດວງດາວອື່ນໆ ນອກ
ຈາກຫນ່ວຍພິພົບ. ໂລກມະນຸດຖືກປະກາດເປັນໂລກທີ່ມີບາບກໍາ, ເປັນໂລກທີ່
ບໍ່ສໍາເລັດຮູບ ແລະ ມີການປ່ຽນແປງ. ກົງກັນຂ້າມ ໂລກສະຫວັນໄດ້ຮັບການ
ຍ້ອງຍໍເປັນໂລກທີ່ມີຄວາມມັ້ງຄົງ ແລະ ເປັນຄວາມສໍາເລັດຮູບໃນລະດັບສູງ,
ມັນແມ່ນບ່ອນຢູ່ຂອງເທວະບຸດເທວະດາ. ໂກເປີກນິກ ໄດ້ຊີ້ແຈງໃຫ້ເຫັນວ່າບໍ່
ແມ່ນຫນ່ວຍພິພົບ, ແຕ່ຫາກແມ່ນດວງຕາເວັນຕັ້ງຢູ່ໃຈກາງຂອງໂລກ ( ຢູ່ໃຈ
ກາງຂອງລະບົບຕາເວັນ, ດັ່ງທີ່ໄດ້ຄົ້ນພົບຕາມທີຫລັງ ) ແລະຫນ່ວຍພິພົບ -
ແລະ ດວງດາວອື່ນໆ ປິ່ນອ້ອມດວງຕາເວັນ. ຫນ່ວຍພິພົບບໍ່ມີຄວາມແຕກຕ່າງ
ໃນດ້ານຫລັກການ ກັບດວງດາວຕ່າງໆ ເຊັ່ນດາວພະອັງຄານ, ດາວພະສຸກ,
ດາວພະຫັດ, ດາວເສົາ ແລະ ການແບ່ງແຍກໂລກມະນຸດ ແລະ ໂລກສະ -
ຫວັນ ບໍ່ມີພື້ນຖານໃດໆທັງຫມົດ. ຍ້ອນຄວາມພະຍາຍາມຂອງໂກເປີກນິກແລະ
ບັນດາຜູ້ສືບທອດຂອງທ່ານເຊັ່ນ ບຣູໂນ ທີ່ຖືກວັດສາສະຫນາເຜົາຢູ່ເທິງກອງ-
ໄຟ ແລະ ກາລີເລ ນັ້ນເອງ ໃນວິທະຍາສາດໄດ້ມີການຢືນຢັນແນວຄິດ ກ່ຽວ
ກັບຄວາມເປັນເອກະພາບ ທາງວັດຖຸ ຂອງໂລກ ທີ່ໄດ້ຮັບການເສີມຂະຫຍາຍ
ຈາກບັນດານັກປາດຮຸ່ນຕໍ່ໆໄປ.

ບັນດາການຄົ້ນຄວ້າວິທະຍາສາດ ສາມາດຢັ້ງຢືນໄດ້ວ່າ ເທິງດວງ ຕາ
ເວັນ ແລະ ເທິງດວງດາວອື່ນໆ ບໍ່ມີທາດທີ່ຄົນເຮົາບໍ່ທັນຮູ້ເທື່ອ. ຈິງແທ້ ມີ ກໍ
ລະນີຫນຶ່ງທີ່ວ່າ ມີການຄົ້ນພົບທາດໃຫມ່ເທິງດວງຕາເວັນ ຄືທາດ ເຮລີ ແລະ
ຫຼັງຈາກນັ້ນໄລຍະຫນຶ່ງ ທາດນີ້ກໍ່ຖືກຄົ້ນພົບຢູ່ເທິງຫນ່ວຍພິພົບ ເຊັ່ນດຽວກັນ.
ການຄົ້ນພົບນີ້ ເປັນພຽງແຕ່ການຢັ້ງຢືນໃຫມ່ໃຫ້ແກ່ຄວາມເປັນເອກະພາບທາງ
ດ້ານວັດຖຸຂອງໂລກ.

ກ່ອນສະໄຫມຂອງມາກ ຄວາມເຂົ້າໃຈແບບຈິດຕະນິຍົມ ມີຖານະນໍາຫນ້າ
ໃນທິດສະດີກ່ຽວກັບສັງຄົມ ເຊິ່ງໄດ້ຢັ້ງຢືນວ່າ ທໍາມະຊາດ ແລະ ສັງຄົມບໍ່ມີ

ສິ່ງໃດທີ່ຈະເປັນສິ່ງອັນດຽວກັນ, ເນື່ອງຈາກວ່າ ໃນສັງຄົມຈິດສຳນຶກຂອງຄົນ ເປັນສິ່ງຕັດສິນການກະທຳຂອງພວກເຂົາເຈົ້າ, ແລະ ໃນທຳມະຊາດ ບໍ່ມີຈິດ ສຳນຶກ. ຄວາມປີຊາສາມາດຂອງ ກ.ມາກ ໄດ້ສະແດງອອກ ຢູ່ບ່ອນວ່າ– ເບື້ອງຫລັງແຫ່ງຄວາມແຕກຕ່າງກັນ ລະຫວ່າງທຳມະຊາດ ແລະ ສັງຄົມ ນັ້ນ ທ່ານໄດ້ແນມເຫັນສິ່ງທີ່ເປັນອັນດຽວກັນ ເຊິ່ງເປັນສິ່ງທີ່ເຕົ້າໂຮມພວກມັນ,ອຳ ນວຍໃຫ້ຖືວ່າສັງຄົມແມ່ນໜຶ່ງໃນບັນດາຮູບການເຄື່ອນເໜັງຂອງວັດຖຸ. ມາກ ໄດ້ຄົ້ນພົບພື້ນຖານທາງວັດຖຸຂອງຊີວິດສັງຄົມ ຄືການຜະລິດຊັບສິນວັດຖຸ ແລະ ບັນດາກົດເກນພາວະວິໄສວ່າດ້ວຍການຂະຫຍາຍຕົວ ທາງປະຫວັດສາດ ເຊັ່ນ ດຽວກັນກັບໃນທຳມະຊາດ.

ແນວຄິດກ່ຽວກັບຄວາມເປັນເອກະພາບທາງວັດຖຸຂອງໂລກ ໄດ້ກວມເອົາ ຄວາມຮັບຮູ້ ກ່ຽວກັບຄຸນລັກສະນະ (ຮູບການຄົງຢູ່ພື້ນຖານ ) ຂອງວັດຖຸ ຄື ການເຄື່ອນເໜັງ, ກາງຫາວ ແລະ ກາລະເວລາ.

## ໓. ການເຄື່ອນເໜັງແມ່ນວິທີຄົງຢູ່ຂອງວັດຖຸ

ວັດຖຸຄົງຢູ່ໄດ້ພຽງແຕ່ດ້ວຍການເຄື່ອນເໜັງເທົ່ານັ້ນ. ຟ.ອັງແກນ ຂຽນ ວ່າ: "ການເຄື່ອນເໜັງທີ່ໃຈແຍກໃນຄວາມໝາຍລວມທີ່ສຸດ ຂອງສັບນີ້ - ໝາຍຄວາມວ່າໃນຄວາມເຂົ້າໃຈ ທີ່ເປັນວິທີຄົງຢູ່ຂອງວັດຖຸນັ້ນ ເປັນຄຸນ ລັກ ສະນະສະເພາະແຕ່ພາຍໃນວັດຖຸ ມັນກວມລວມເອົາທຸກໆການປ່ຽນແປງ ແລະ ຂະບວນວິວັດໃນເອກະພົບ, ເລີ່ມແຕ່ການເຄື່ອນທີ່ແບບງ່າຍດາຍ ຈົນເຖິງຈິນ ຕະນາການ"[1].

ຄວາມເປັນເອກະພາບທາງວັດຖຸ ຂອງໂລກນັ້ນ ຄົງຢູ່ບ່ອນການກະທົບຊຶ່ງ ກັນແລະກັນ ລະຫວ່າງທຸກໆປະກົດການ ແລະ ການກະທົບຊຶ່ງກັນ ແລະ ກັນ– ນັ້ນ ສະແດງຕົວອອກໂດຍກົງ ເປັນການເຄື່ອນເໜັງ. ໃນຄວາມເວົ້າ ຂອງ ຕົນ ພວກເຮົານຳໃຊ້ບັນດາຄຳສັບເຊັ່ນ "ສາຍພົວພັນ", "ລັກສະນະການພົວ

1) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ,ເຫລັ້ມ ໒໐, ໜ້າ ໓໕໑.

ພົນ ຊຶ່ງຂັ້ນຕໍ່ກັນ ແລະ ກັນ", "ການປະພຶດຕໍ່ກັນ", "ການປ່ຽນແປງ" ຕາມທຳມະດາແລ້ວ ໂດຍບໍ່ຄຳນຶງວ່າ ຄຳສັບເຫລົ່ານີ້ມີຄວາມໝາຍຄືກັນ ພວກມັນລ້ວນແຕ່ໝາຍເຖິງການເຄື່ອນເໜັງ ໃນຮູບການຕ່າງໆຂອງມັນ.

ພວກເຮົາສາມາດຮັບຮູ້ສິ່ງວັດຖຸ ແລະ ປະກົດການພຽງແຕ່ຍ້ອນມີການ - ເຄື່ອນເໜັງຂອງພວກມັນ. ພວກເຮົາໄຈ້ແຍກສີຂອງສິ່ງຂອງກໍ່ຍ້ອນສິ່ງ ຂອງສົ່ງລັງສີຂອງສີ ແລະ ໄດ້ກະທົບເຂົ້າສາຍຕາຂອງພວກເຮົາ. ນິດໄສຂອງຄົນສະແດງອອກມາພຽງແຕ່ໃນການກະທຳຂອງເຂົາເທົ່ານັ້ນ. ນັກຈິດຕະສາດ - ບາງຄົນ ຄາດຕວງວ່າ ການເຄື່ອນເໜັງຄົງ ຢູ່ຜູດຽວໂດຍບໍ່ມີວັດຖຸ. ຕາມຄວາມເຫັນຂອງພວກເຂົາເຈົ້າແລ້ວ ແມ່ນມີການເຄື່ອນເໜັງແຕ່ບໍ່ມີສິ່ງຂອງທີ່ເຄື່ອນເໜັງ. ໃນປຶ້ມ "ລັດທິວັດຖຸນິຍົມ ແລະລັດທິບົດຣຽນຕຳໜິວິພາກ"ວ. ອິ.ເລນິນ ໄດ້ຊີ້ແຈງວ່າ ຄວາມຢັ້ງຢືນຂອງພວກຈິດຕະນິຍົມ ກ່ຽວກັບການຄົງຢູ່ຂອງການເຄື່ອນເໜັງ ໂດຍບໍ່ມີວັດຖຸນັ້ນ ໝາຍຄວາມວ່າມີແຕ່ແນວຄິດເທົ່ານັ້ນມີການເຄື່ອນເໜັງ,ວ່າມີຈິນຕະນາການຄົງຢູ່ໂດຍບໍ່ມີວັດຖຸ, ມີແນວ ຄິດໂດຍບໍ່ມີມັນສະໝອງ. ເລນິນຂຽນວາ:"... ຄວາມພະຍາຍາມ ຢາກວາດພາບການເຄື່ອນເໜັງໂດຍປາສະຈາກວັດຖຸນັ້ນ ນຳໄປເຖິງແນວຄິດ ທີ່ຕັດ - ຂາດຈາກວັດຖຸ ແລະ ອັນນີ້ແມ່ນຈິດຕະນິຍົມໃນປັດຈຸບັນ"[1].

ໂດຍເປັນວິທີຄົງຢູ່,ເປັນຄຸນລັກສະນະຂອງວັດຖຸ,ການເຄື່ອນເໜັງ ມີລັກສະນະລວມ, ບໍ່ແມ່ນສິ່ງທີ່ປັ້ນແຕ່ງຂຶ້ນມາໄດ້ ແລະ ບໍ່ອາດຈະດັບສູນໄດ້, ສະນັ້ນຈຶ່ງບໍ່ມີສາຍເຫດໃດທີ່ຈະພາໃຫ້ເກີດມີການເຄື່ອນເໜັງ. ເຊັ່ນດຽວ ກັບເລື່ອງທີ່ວ່າ ບໍ່ມີສາຍເຫດຂອງການຄົງຢູ່ຂອງວັດຖຸ ກໍບໍ່ມີສາຍເຫດ ຂອງການເຄື່ອນເໜັງຄືກັນ. ການເຄື່ອນເໜັງນັ້ນເອງ ພາໃຫ້ເກີດມີຄວາມ ຂັດແຍ່ງຢ່າງເປັນປະຈຳ ທີ່ຍູ້ໜູນການເຄື່ອນເໜັງ.

ຖ້າຫາກສົມມຸດວ່າ ມີສິ່ງວັດຖຸໃດໜຶ່ງທີ່ຢູ່ນອກການເຄື່ອນເໜັງ ໃນພາວະຄວາມສະຫງົບເດັດຂາດແລ້ວ ແມ່ນຈຳຕ້ອງຮັບຮູ້ໃນທັນໃດໂລດວ່າ ສິ່ງວັດຖຸນີ້ຈະບໍ່ສະແດງຕົວອອກໃນຮູບການໃດໆ ວ່າມັນຄົງຢູ່ ແລະ ກໍບໍ່ມີຄວາມ ສາມາດຈະຮັບຮູ້ມັນໄດ້.

---

໑) ວ.ອິ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມ ໑໘, ໜ້າ ໔໒໔.

ຄວາມສະຫງົບຫລືຄວາມໝັ້ນທ່ຽງ ມີຄວາມໝາຍສຳຄັນ,ຍ້ອນມີ ຄວາມສະຫງົບ ພວກເຮົາຈຶ່ງສາມາດສັງເກດເຫັນການເຄື່ອນເໜັງ, ບໍ່ມີຄວາມສະຫງົບ ແລະ ຄວາມໝັ້ນທ່ຽງ ກໍ່ບໍ່ອາດຈະມີການປ່ຽນແປງ, ເພາະວ່າ ໃນກໍລະນັ້ນ ຈະບໍ່ມີຫຍັງພໍຈະປ່ຽນແປງ. ເປົ້າໝາຍວັດຖຸແຕ່ລະແນວ ເຊັ່ນຜາຫີນ ກົກໄມ້, ເຮືອນ, ຄົນ ໃນໄລຍະເວລາອັນແນນອນ ຍັງຮັກສາຮູບຮ່າງ ຂອງຕົນໄດ້ຢູ່, ໝາຍຄວາມວ່າຍັງເປັນຜາຫີນນັ້ນ, ກົກໄມ້ຕົ້ນນັ້ນ, ເຮືອນ ຫລັງນັ້ນ, ຄົນຜູ້ນັ້ນຢູ່. ແຕ່ຄວາມໝັ້ນທ່ຽງຂອງສິ່ງວັດຖຸເຊັ່ນນັ້ນບໍ່ໝາຍຄວາມ ວ່າໃນກະໂຕນັ້ນບໍ່ມີການເຄື່ອນເໜັງ, ບໍ່ມີການປ່ຽນແປງ. ກົງກັນຂ້າມ, ພາຍໃຕ້ການກະທົບຂອງສາຍເຫດຕ່າງໆໃນສິ່ງວັດຖຸໄດ້ເກີດມີການປ່ຽນແປງ,ເຖິງແມ່ນວ່າຈະເປັນການປ່ຽນແປງທີ່ບໍ່ສັງເກດເຫັນໄດ້ກໍຕາມ. ພາຍໃຕ້ຜົນສະ - ທ້ອນຂອງລົມ, ນ້ຳ, ການປ່ຽນແປງອຸນຫະພູມ, ການເກີດແຜ່ນດິນໄຫວແລະສາຍເຫດອື່ນໆອີກ, ຜາຫີນຖືກພັງທະລາຍຢ່າງເປັນປະຈຳ ແລະ ຜ່ານຫລາຍສິບລ້ານປີຈະຖືກພັງທະລາຍຈົນເຖິງຮາກຖານ. ກົກໄມ້ເຕີບໃຫຍ່ຢ່າງບໍ່ຢຸດຢັ້ງເຊິ່ງແມ່ນວ່າບາງປີກໍ່ເຕີບໃຫຍ່ໄວກວ່າ ບາງປີກໍຊ້າກວ່າກໍຕາມ; ໃນທີ່ສຸດມັນກໍ່ຈະຕາຍໄປ. ຄົນກໍ່ເປັນເຊັ່ນດຽວກັນ ຄົນປ່ຽນແປງໄປພ້ອມກັບອາຍຸ, ສະພາບການຂອງຄົນຂຶ້ນກັບອາລົມ, ຂຶ້ນກັບວ່າຄົນສະບາຍດີຫລືບໍ່, ອີ່ມຫລືຫິວ . ດັ່ງທີ່ໄດ້ເຫັນຜ່ານຕົວຢ່າງຂ້າງເທິງນີ້ ຄວາມສະຫງົບແມ່ນສິ່ງທຽບຖານເນື່ອງຈາກວ່າສິ່ງວັດຖຸທີ່ສະຫງົບນັ້ນ ເຂົ້າຮ່ວມໃນຮູບແບບຕ່າງໆຂອງການ ເຄື່ອນເໜັງ.

ເຮືອນທີ່ຄົນໄດ້ສ້າງຂຶ້ນມານັ້ນ ຢູ່ໃນສະພາບສະຫງົບໂດຍທຽບຖານ ກັບໜ່ວຍໂລກ ກັບໜ້າດິນ ແຕ່ໃນໄລຍະດຽວກັນນັ້ນ ເຮືອນໝູນໄປ ພ້ອມກັນ-ກັບໜ່ວຍໂລກ ທີ່ໝູນໄປຮອບໜຶ່ງ ໒໔ ຊົ່ວໂມງ ແລະ ໝູນອ້ອມດວງ ຕາເວັນ; ພາກສ່ວນໄມ້ຢູ່ໃນເຮືອນ ໃນກໍລະນີຖືກນ້ຳຈະໃຄ່ຂຶ້ນ ໃນລະດູແລ້ງຈະຫົດເຂົ້າ ໃນນັ້ນຍັງມີການປ່ຽນແປງຕ່າງໆ ແລະ ໃນຜົນສຸດທ້າຍເຮືອນຈະຖືກພັງທະລາຍ. ຄວນສັງເກດວ່າ ພາຍໃຕ້ ຜົນສະທ້ອນຂອງການດຶງດູດຂອງ - ດວງເດືອນ ໜ້າດິນແຂງຂອງໜ່ວຍພິພົບຂອງພວກເຮົາ ບາງເວລາສູງຂຶ້ນຫລືຕ່ຳລົງເຊັ່ນດຽວກັນກັບປະກົດການຢູ່ເທິງໜ້າມະຫາສະໝຸດ ແລະ ນ້ຳທະເລ ແຕເທິງໜ້າດິນແຂງ ການຂຶ້ນ ແລະ ລົງດັ່ງກ່າວນັ້ນບໍ່ຫລາຍ ແລະ ສາ

ມາດຈະສັງເກດເຫັນມັນໄດ້ພຽງແຕ່ດ້ວຍການຊ່ວຍເຫລືອຂອງເຄື່ອງຈັກ.

ການເຄື່ອນເຫນັງ ແມ່ນສິ່ງທີ່ຕັດຂາດຈາກວັດຖຸ ບໍ່ໄດ້,ມັນເປັນສິ່ງທີ່ ຖາວອນ, ບໍ່ອາດຈະປັ້ນແຕ່ງ ແລະ ດັບສູນມັນໄດ້ ດັ່ງດຽວກັນກັບກະໂຕ ວັດຖຸ ແລະໃນຄວາມຫມາຍນີ້ ການເຄື່ອນເຫນັງເປັນສິ່ງເດັດຖານ. ໃນການເຄື່ອນເຫນັງອັນບໍ່ຢຸດຢັ້ງຂອງວັດຖຸມີປະກົດການຫລາຍຮູບຫລາຍສີເກີດຂຶ້ນ ໃນໂລກ, ອັນເປັນການຢັ້ງຢືນວ່າວັດຖຸຄືງຢູ່ໃນຮູບແບບຕ່າງໆຂອງການເຄື່ອນເຫນັງເຊິ່ງມີຈຳນວນມາກມາຍມະຫາສານ.

ຟ. ອັງແກນ ໄດ້ສະເຫນີໃຫ້ແບ່ງພຸກໆຮູບແບບຂອງການເຄື່ອນເຫນັງ ທີ່ວິທະຍາສາດໄດ້ຮັບຮູ້ມາແລ້ວນັ້ນອອກເປັນຫ້າປະເພດ ຫລືຮູບແບບການເຄື່ອນເຫນັງແບບພື້ນຖານຂອງວັດຖຸ: ເຊັ່ນຮູບແບບເຄື່ອນເຫນັງແບບກົນຈັກ, ແບບວັດຖຸວິທະຍາ, ແບບເຄມີ, ແບບຊີວະ ແລະ ແບບສັງຄົມ.

ຮູບແບບການເຄື່ອນເຫນັງແບບກົນຈັກຂອງວັດຖຸ ແມ່ນຮູບແບບທີ່ ງ່າຍດາຍທີ່ສຸດ. ມັນກວມເອົາ ບັນດາຮູບແບບຕົວຈິງຈຳນວນຫລວງຫລາຍ: ການເຄື່ອນຍ້າຍຂອງຫມູ່ດວງດາວ,ຂອງດວງດາວ ບາງຫນ່ວຍໃນກາງຫາວ,ການເຄື່ອນເຫນັງຂອງລົດ ແລະ ຍົນເດີນທາງບິນເສັ້ນທາງ; ການເຄື່ອນ ເຫນັງຕາມເສັ້ນຊື່ ແລະ ເສັ້ນກົ່ງ,ການເຄື່ອນເຫນັງທີ່ມີຄວາມໄວເພີ່ມຂຶ້ນ ແລະ ມີຄວາມໄວຜ່ອນລົງ ແລະ ອື່ນໆ. ພຸກໆຮູບແບບການເຄື່ອນເຫນັງທີ່ກ່າວມາ - ຂ້າງເທິງນີ້ ມີຈຸດພິເສດຄືກັນ ຄືພວກມັນແມ່ນການເຄື່ອນຍ້າຍທີ່ງ່າຍດາຍຂອງສິ່ງວັດຖຸໃນກາງຫາວ ໃນເມື່ອກະໂຕສິ່ງວັດຖຸບໍ່ມີການປ່ຽນແປງ, ຮັກສາເປັນສິ່ງວັດຖຸນັ້ນເຫມືອນເດີມ. ຮູບແບບການເຄື່ອນເຫນັງແບບວັດຖຸວິທະຍາ ແມ່ນການດຶງດູດ ແລະ ດັນອອກ, ຄວາມຮ້ອນ, ໄຟຟ້າ, ແມ່ເຫລັກ, ສຽງ , ການເຄື່ອນເຫນັງຂອງເມັດພື້ນຖານ (ອະນຸພາກ) ຢູ່ພາຍໃນປະລະມານູ.ຮູບແບບການເຄື່ອນເຫນັງແບບເຄມີ ແມ່ນການປະສົມ ແລະ ການພົນແຍກ ຂອງປະລະມານູ ແລະ ໂມລະກູນ. ຮູບແບບການເຄື່ອນເຫນັງແບບຊີວະແມ່ນ ຮູບແບບທີ່ສັບສົນກວ່າ, ມັນກ່ຽວພັນກັບການດຳເນີນຊີວິດຂອງຈຸລັງທີ່ມີຊີວິດ ແລະ ສິ່ງທີ່ມີຊີວິດເວົ້າລວມ. ແລະ ໃນທີ່ສຸດ ຮູບແບບການເຄື່ອນເຫນັງແບບສັງຄົມ ແມ່ນການເຄື່ອນໄຫວທີ່ມີເປົ້າຫມາຍຂອງຄົນ ທີ່ດຳເນີນໄປໃນການພົວພັນ ຊຶ່ງກັນ ແລະ ກັນລະຫວ່າງບັນດາຊົນຊັ້ນ, ປະຊາຊົນ, ອົງການຈັດຕັ້ງສັງຄົມ ທີ່

ແຕກຕ່າງກັນ ແລະ ໃນການສ່ອງແສງຄວາມເປັນຈິງຮອບຕົວຄົນ ຕໍ່ຈິດສຳນຶກຂອງພວກເຂົາເຈົ້າ.

ບັນດາຮູບແບບການເຄື່ອນເໜັງຂອງວັດຖຸ ບໍ່ໄດ້ຕັດຂາດຈາກກັນ. ລະຫວ່າງບັນດາຮູບແບບດັ່ງກ່າວມີສາຍກ່ຽວພັນຢ່າງແໜ້ນແຟ້ນ, ມີການ ກະທົບຈຶ່ງກັນ ແລະ ກັນ. ການກະທົບຈຶ່ງກັນແລະກັນນີ້ ດຳເນີນໄປຕາມຫລາຍ ທິດທາງ ແຕ່ມີສອງຈຸດທີ່ຄວນເນັ້ນໜັກໂດຍສະເພາະ. ຮູບແບບການເຄື່ອນເໜັງຂອງວັດຖຸທີ່ມີລະດັບສູງກວ່າ ເກີດຂຶ້ນມາລຸນຮູບແບບທີ່ມີລະດັບຕ່ຳກວ່ານັ້ນ ເນື່ອງຈາກວ່າຮູບແບບທີ່ມີລະດັບສູງກວ່າແມ່ນໝາກຜົນຂອງການຜັນປ່ຽນຈາກຮູບແບບທີ່ມີລະດັບຕ່ຳກວ່າກ້າວຂຶ້ນເປັນຮູບແບບທີ່ສົມບູນກວ່າ, ດັ່ງນັ້ນ , ຮູບແບບທີ່ມີລະດັບສູງກວ່ານັ້ນຈຶ່ງກຳເນີດຂຶ້ນໄປບົນພື້ນຖານຂອງຮູບແບບທີ່ມີລະດັບຕ່ຳກວ່າ. ບໍ່ອາດຈະເຂົ້າໃຈການໄປມາຂອງແຕ່ລະຮູບແບບໄດ້ ຖ້າຫາກບໍ່ເອົາໃຈໃສ່ສາຍພົວພັນຂອງມັນ ກັບຮູບແບບກ່ອນນັ້ນ. ສິ່ງທີ່ມີຊີວິດໄດ້ເກີດ ມີຂຶ້ນໃນເມື່ອການວິວັດດ້ານເຄມີໄດ້ນຳໄປເຖິງການກໍ່ຕັ້ງ ໂປຼເຕອິນ ແລະ ອາຊິດນູກະເລອິນ ທີ່ມີໂມລະກູນທີ່ສັບສົນຫລາຍ. ຊີວິດແມ່ນວິທີຄົງຢູ່ຂອງສິ່ງວັດຖຸ ໂປຼເຕອິນ ແລະ ອາຊິດນູກະເລອິນ.

ໃນແຕ່ລະຮູບ ແບບການເຄື່ອນເໜັງທີ່ສັບສົນ ລ້ວນແຕ່ມີຮູບແບບທີ່ ງ່າຍດາຍກວ່າ ແລະ ຮູບແບບທີ່ງ່າຍດາຍກວ່ານັ້ນຂຶ້ນກັບຮູບແບບທີ່ສັບສົນດັ່ງກ່າວ. ດັ່ງສິ່ງທີ່ມີຊີວິດເຊິ່ງການເຄື່ອນທີ່ແບບມີຊີວິດຂອງມັນເປັນຮູບແບບການເຄື່ອນເໜັງທີ່ສັບສົນກວ່ານັ້ນ ຮັກສາການແລກປ່ຽນທາດລະຫວ່າງຕົນເອງ ແລະບັນຍາກາດພາຍນອກ ຢ່າງເປັນປະຈຳ. ອາຫານຖືກສົ່ງເຂົ້າສິ່ງມີຊີວິດນັ້ນຖືກລະລາຍ ແລະ ຖືກຮັບເອົາໂດຍສິ່ງມີຊີວິດ,ມັນເປັນຄວາມຈຳເປັນສຳລັບການເຕີບໃຫຍ່ຂອງສິ່ງມີຊີວິດ ທັງສຳລັບການຄ້ຳຊູຊີວິດ,ສຳລັບການເຄື່ອນໄຫວຂອງມັນ. ສິ່ງເສດເຫລືອຈາກການລະລາຍຖືກສົ່ງອອກຈາກສິ່ງມີຊີວິດ ໄປສູ່ບັນຍາກາດພາຍນອກ ຄືນອີກ. ການຫາຍໃຈກໍ່ແມ່ນການແລກປ່ຽນທາດ ເຊັ່ນດຽວກັນ. ມີການກະທົບທາງເຄມີ ໃນການລະລາຍອາຫານ ແລະ ອາກາດ. ດ້ວຍເຫດນັ້ນ ໃນສິ່ງທີ່ມີຊີວິດມີການເຄື່ອນເໜັງທາງເຄມີ. ໃນສິ່ງທີ່ມີ ຊີວິດຍັງສັງເກດພົບກະແສໄຟຟ້າ ໝາຍຄວາມວ່າການເຄື່ອນເໜັງແບບວັດຖຸວິທະຍາ.

ບັນດານັກປັດຊະຍາອະພິທຳບໍ່ຄຳນຶງເຖິງສອງປະເພດດັ່ງໄດ້ກ່າວມາເທິງນີ້ ແລະ ດ້ວຍເຫດນັ້ນຈຶ່ງໄດ້ມີການບິດເບືອນຄວາມເປັນຈິງ. ເຊັ່ນຕົວຢ່າງໃນຊີວະສາດ ພວກເຂົາເຈົ້າແຍກຮູບແບບຊີວະສາດຈາກຮູບແບບການ ເຄື່ອນເໜັງຂອງວັດຖຸທີ່ມີລະດັບຕ່ຳ. ການແຍກດັ່ງນີ້ກີດຂວາງບໍ່ໃຫ້ຜູ້ຍຶດຖືທິດສະນະເຊັ່ນນີ້ໃນການເຂົ້າໃຈການເປັນມາຂອງຊີວິດ, ການກຳເນີດຂອງມັນຈາກທຳມະຊາດທີ່ບໍ່ມີຊີວິດ ແລະ ບັງຄັບໃຫ້ຊອກຫາສາຍເຫດການກຳເນີດຂອງສິ່ງ ທີ່ມີຊີວິດໃນພຶດຕິກຳຂອງເທວະດາ ຫາກບໍ່ແມ່ນໃນວິວັດທະນາການຂອງກະໂຕ-ທຳມະຊາດເອງ. ດັ່ງນີ້ເອງຄວາມບໍ່ປາດຖະໜາຢາກເຫັນສາຍພົວພັນ ລະຫວ່າງຮູບແບບການເຄື່ອນເໜັງລະດັບຕ່ຳ ແລະ ສູງນັ້ນບໍ່ອຳນວຍຄວາມ ສາມາດໃຫ້ເຂົ້າໃຈວ່າຮູບແບບການເຄື່ອນເໜັງລະດັບສູງນັ້ນເກີດມາຈາກໃສ.

ໃນກໍລະນີອື່ນ ບັນດານັກອະພິທຳປະກາດວ່າ ບໍ່ມີຄວາມແຕກຕ່າງກັນດ້ານຫຼັກການ ແລະຄຸນນະພາບລະຫວ່າງຮູບແບບການເຄື່ອນເໜັງລະດັບສູງແລະຕ່ຳ ແລະ ດ້ວຍເຫດນັ້ນ ໃນຮູບແບບການເຄື່ອນເໜັງລະດັບສູງຂອງວັດຖຸ ບໍ່ມີສິ່ງໃດທີ່ຈະບໍ່ມີຫນ້າໃນຮູບແບບການເຄື່ອນເໜັງລະດັບຕ່ຳ. ເນື່ອງຈາກວ່າໃນຮູບແບບການເຄື່ອນເໜັງລະດັບສູງນັ້ນ ມີບັນດາຮູບແບບລະດັບຕ່ຳ, ສະນັ້ນຕາມຄວາມເຫັນຂອງບັນດານັກອະພິທຳແລ້ວ ທຸກໆຮູບແບບລະດັບສູງຈຶ່ງ ຄວນຈັດເຂົ້າໃນປະເພດຂອງຮູບແບບລະດັບຕ່ຳ ໝາຍຄວາມວ່າ ທຸກໆການວິວັດດ້ານວັດຖຸວິທະຍາ, ເຄມີສາດ, ຊີວະ ແລະ ສັງຄົມ ລ້ວນແຕ່ແມ່ນພາກສ່ວນໜຶ່ງຂອງຮູບແບບກົນຈັກ. ແນ່ນອນຜູ້ຄົນເຄື່ອນຍ້າຍ ຈາກບ່ອນໜຶ່ງ ໄປອີກບ່ອນໜຶ່ງ ໝາຍຄວາມວ່າເຂົາເຈົ້າເຂົ້າຮ່ວມໃນການເຄື່ອນເໜັງ ທາງກົນຈັກ ແຕ່ຊີວິດຂອງສັງຄົມບໍ່ຈຳກັດພຽງແຕ່ການເຄື່ອນຍ້າຍດັ່ງນີ້ເທົ່ານັ້ນ. ເຊັ່ນຕົວຢ່າງ ການເຄື່ອນຍ້າຍດັ່ງກ່າວບໍ່ອຳນວຍຄວາມສາມາດໃຫ້ເຂົ້າໃຈ ທາດແທ້ຂອງການປະຕິວັດທີ່ໄດ້ເກີດຂຶ້ນຢູ່ໃນປະເທດລາວ ແລະ ທີ່ໄດ້ດຳເນີນການດັດສ້າງຊົນນະບົດ ແລະ ຕົວເມືອງຢ່າງເລິກເຊິ່ງ, ໄດ້ປ່ຽນແປງທົ່ວທັງແບບແຜນການດຳລົງຊີວິດ. ການປະຕິວັດຢູ່ລາວ ແມ່ນປະກົດການທາງສັງຄົມແບບພິເສດດ້ານຄຸນນະພາບທີ່ຈະຈັດເຂົ້າໃນການເຄື່ອນເໜັງແບບກົນຈັກນັ້ນບໍ່ໄດ້,, ກໍຄືຈະຖືເອົາດ້ານອື່ນໆທີ່ສຳຄັນຂອງຊີວິດສັງຄົມ ຂອງການເຄື່ອນໄຫວຂອງຄົນນັ້ນເປັນການເຄື່ອນເໜັງແບບກົນຈັກ ແມ່ນບໍ່ໄດ້. ຮູບແບບການເຄື່ອນເໜັງ

ລະດັບສູງບໍ່ອາດຈັດເຂົ້າໃນຮູບແບບລະດັບຕໍ່າມັ້ນໄດ້.

ແຕ່ລະຮູບແບບການເຄື່ອນໄຫວຂອງວັດຖຸມີຈຸດພິເສດ ແລະ ກົດເກນສະເພາະຂອງຕົນ ແລະ ຂອງວັດຖຸດັ່ງກ່າວເທົ່ານັ້ນ ແລະ ເພື່ອຄົ້ນຄວ້າຈຸດ ພິເສດດັ່ງກ່າວ ຈຶ່ງໄດ້ເກີດມີວິທະຍາສາດສະເພາະ ເຊັ່ນວັດຖຸວິທະຍາ, ເຄມີສາດ, ຊີວະສາດ ແລະ ອື່ນໆ. ເນື່ອງຈາກວ່າລະຫວ່າງບັນດາຮູບແບບການເຄື່ອນໄຫວສະເພາະຂອງວັດຖຸນັ້ນ ມີການກະທົບຊຶ່ງກັນແລະກັນ ຢ່າງແໜ້ນແຟ້ນແລ້ວ ແມ່ນວ່າລະຫວ່າງບັນດາວິທະຍາສາດສະເພາະ ກໍ່ມີລັກສະນະການກະທົບຊຶ່ງກັນແລະກັນດັ່ງນີ້ເຊັ່ນດຽວກັນ. ວັດຖຸວິທະຍານຳໃຊ້ແນວຄິດ ແລະ - ແບບວິທີເຄມີສາດ ແລະ ເຄມີສາດນຳໃຊ້ຫລາຍສິ່ງຫລາຍແນວ ຈາກວັດຖຸວິ-ທະຍາ; ຊີວະສາດອີງໃສ່ແນວຄິດ ແລະ ແບບວິທີຂອງວັດຖຸວິທະຍາກໍ່ດີ ເຄມີສາດໃນຫລາຍດ້ານ. ຄວາມເປັນເອກະພາບຂອງໂລກວັດຖຸກໍ່ ບົ່ງຕົວ ຄວາມເປັນເອກະພາບ, ສາຍພົວພັນລະຫວ່າງບັນດາວິທະຍາສາດທີ່ຄົ້ນຄວ້າໂລກວັດຖຸນັ້ນ.

ການຄົ້ນຄວ້າບັນດາປະກົດການ ເຊິ່ງໃນນັ້ນມີທັງຄົນ ໄດ້ນຳພວກເຮົາໄປເຖິງຂໍ້ສະຫລຸບວ່າທຸກໆປະກົດການລ້ວນຢູ່ ຍ້ອນວ່າພວກມັນຢູ່ໃນການເຄື່ອນ - ໄຫວ. ການເຄື່ອນໄຫວສະແດງຕົວໃນຖານະເປັນຮູບແບບ (ວິທີ) ຂອງການຄົງຢູ່ຂອງວັດຖຸ.

## ໔. ກາງຫາວ ແລະ ກາລະເວລາ ແມ່ນຮູບແບບ ການຄົງຢູ່ຂອງວັດຖຸ ທີ່ເຄື່ອນໄຫວ

ໃນຊີວິດປະຈຳວັນ ບໍ່ແມ່ນເວລາໃດຄົນເຮົາກໍ່ສຳນຶກຢ່າງຖືກຕ້ອງວ່າກາງຫາວແມ່ນຫຍັງ ແລະ ກາລະເວລາແມ່ນຫຍັງ. ຄົນເຮົາມັກຄິດວ່າ ກາງຫາວແລະກາລະເວລາຄົງຢູ່ໂດຍລຳພັງ ແລະ ວ່າປະກົດການອື່ນໆຢູ່ອ້ອມຂ້າງເຮົາກໍ່ຄົງຢູ່ ຕ່າງຫາກ ແລະ ວ່າລະຫວ່າງພວກມັນບໍ່ມີການພົວພັນຂຶ້ນຕໍ່ກັນປະການໃດ. ໃນຕົວຈິງແລ້ວ ກາງຫາວ ແລະ ກາລະເວລາບໍ່ຄົງຕົວໂດຍລຳພັງໂດຍບໍ່ຂຶ້ນກັບສິ່ງວັດຖຸ, ພວກມັນເປັນຂອງສິ່ງວັດຖຸເຫລົ່ານັ້ນແລະແມ່ນຮູບແບບ ການ

ຄົງຢູ່ ຂອງພວກມັນ.

ຖ້າຫາກພວກເຮົາເອົາສິ່ງຂອງໃດໜຶ່ງແລ້ວ ແມ່ນວ່າພວກເຮົາ ສາມາດສັງເກດເຫັນວ່າ ມັນມີຂະໜາດ, ໄລຍະຫ່າງອັນແນ່ນອນ,ມັນມີລວງຍາວ , ລວງກ້ວາງ ລວງສູງ ຮູບຮ່າງພາຍນອກ (ຮູບໝາກບານ, ຮູບກະບອກ,ຮູບຈວຍ ແລະ ອື່ນໆ), ບໍລິມາດ. ຖ້າທຽບຖານກັບສິ່ງວັດຖຸອື່ນໆແລ້ວ ສິ່ງວັດຖຸນັ້ນມີທີ່ຕັ້ງອັນແນ່ນອນ. ທຸກໆການເຄື່ອນເໜັງໝາຍເຖິງການເຄື່ອນຍ້າຍຂອງສິ່ງວັດຖຸຈາກບ່ອນໜຶ່ງໄປອີກບ່ອນໜຶ່ງ ແລະ ການເຄື່ອນເໜັງຂອງວັດຖຸ ເປັນໄປໄດ້ກໍແຕ່ໃນກາງຫາວ, ບໍ່ອາດເປັນໄປໄດ້ຢູ່ນອກກາງຫາວ.ກາງຫາວແມ່ນເງື່ອນໄຂຕົ້ນຕໍຂອງການເຄື່ອນເໜັງຂອງວັດຖຸ.

ກາງຫາວ ແມ່ນຮູບແບບການຄົງຕົວແບບພາວະວິໄສຂອງວັດຖຸ ທີ່ ເຄື່ອນເໜັງ, ແມ່ນໄລຍະຫ່າງຂອງສິ່ງວັດຖຸຕ່າງໆ ແລະ ທີ່ຕັ້ງທຽບຖານລະຫວ່າງພວກມັນ.

ທຸກໆປະກົດການມີໄລຍະການຄົງຢູ່ຂອງຕົນຢ່າງແຕກຕ່າງກັນ,ຈຳນວນໜຶ່ງມີໄລຍະຍາວກວ່າ ອີກຈຳນວນໜຶ່ງມີໄລຍະສັ້ນກວ່າ. ຖ້າຫາກກ່ອນການພັງທະລາຍຂອງມັນ ຜາຫີນໄດ້ຄົງຢູ່ຫລາຍລ້ານປີແລ້ວ ແຕ່ກົກໄມ້ທີ່ມີອາຍຸ ຍືນກວ່າໝູ່ນັ້ນ ຄົງຢູ່ພຽງບໍ່ເທົ່າໃດພັນປີເທົ່ານັ້ນ. ແມງກະເບື້ອງບາງຊະນິດ ມີຊີວິດມື້ໜຶ່ງຄືນໜຶ່ງ,ແຕ່ເມັດພົນຖານຫລາຍຊະນິດ ທີ່ບັນດານັກວັດຖຸວິທະ ຍາໄດ້ຄົ້ນພົບນັ້ນ ຄົງຢູ່ພຽງແຕ່ໜຶ່ງສ່ວນລ້ານຂອງວິນາທີເທົ່ານັ້ນ, ໝາຍຄວາມວ່າ ໜ້ອຍຈົນບໍ່ສາມາດຄຳນຶງໄດ້. ບັນດາປະກົດການໃນໄລຍະທີ່ຍັງຄົງຢູ່ນັ້ນດຳເນີນຜ່ານຂັ້ນໄດໜຶ່ງ ທີ່ສືບທອດກັນໄປຢ່າງເນື່ອງນິດລຽນຕິດ. ເຊັ່ນຕົວຢ່າງຄົນເຮົາເລີ່ມຕົ້ນຊີວິດແຕ່ຂັ້ນໄວເດັກ ຕໍ່ຈາກນັ້ນຜ່ານໄປສູ່ໄວໜຸ່ມ ຕໍ່ໄປເຂົ້າສູ່ໄວເຕັມກະສຽນ ແລະ ສິ້ນສຸດຊີວິດລົງໃນໄວເຖົ້າແກ່. ໃນເມື່ອ ຖືກເຜົາໃນເບື້ອງຕົ້ນເຫລັກກ້າມີສີແດງເຂັ້ມ ຜ່ານການຊຸບເຜົາໃນຂັ້ນຕໍ່ໄປຈະປະກົດມີສີເຫລືອງ. ໄລຍະຕ່າງໆຂອງການປ່ຽນແປງຂອງປະກົດການນີ້ ຫລື ປະກົດການນັ້ນ ຄົງຕົວໃນກາລະເວລາແຕກຕ່າງກັນ ໝາຍຄວາມວ່າໄລຍະໜຶ່ງສິ້ນສຸດລົງໄປແລ້ວ ໄລຍະອື່ນກໍຕິດຕາມມາ. ຕົວຢ່າງທຸກປະກົດການເຫລົ່ານີ້ໄດ້ຊີ້ແຈງເຖິງການທີ່ວ່າ ການຄົງຕົວຂອງສິ່ງວັດຖຸ ການເຄື່ອນເໜັງ ການປ່ຽນແປງຂອງພວກມັນ ອາດຈະເປັນໄປໄດ້ພຽງແຕ່ໃນກາລະເວລາເທົ່ານັ້ນ.

ກາລະເວລາ ແມ່ນຮູບແບບພາວະວິໄສການຄົງຢູ່ຂອງວັດຖຸ ທີ່ເຄື່ອນ - ເຫນັງ,ແມ່ນໄລຍະ ແລະ ລຳດັບຂອງຂະບວນວິວັດຂອງວັດຖຸ. ວ.ອີ.ເລນິນ ໄດ້ຂຽນວ່າ "ໃນໂລກນີ້ບໍ່ມີ ຫຍັງ ນອກຈາກວັດຖຸທີ່ເຄື່ອນເຫນັງ ແລະ ວັດຖຸ ທີ່ເຄື່ອນເຫນັງນັ້ນບໍ່ສາມາດຈະເຄື່ອນເຫນັງແບບອື່ນໄດ້ ນອກຈາກຈະເຄື່ອນ-ເຫນັງໃນກາງຫາວ ແລະ ໃນກາລະເວລາ "[໑].

ປັດຊະຍາຈິດຕະນິຍົມປະຕິເສດວັດຖຸທີ່ເປັນຄວາມເປັນຈິງແບບພາວະວິໄສ ແລະ ພ້ອມກັນນັ້ນ ບໍ່ຮັບຮູ້ກາງຫາວ ແລະ ກາລະເວລາ ເປັນຮູບແບບຄົງຕົວຂອງວັດຖຸ ແບບພາວະວິໄສ ແລະ ບໍ່ຂຶ້ນກັບຈິດສຳນຶກ. ສຳລັບນັກຈິດຕະນິຍົມແລ້ວ ກາງຫາວ ແລະ ກາລະເວລາຂຶ້ນກັບຈິດສຳນຶກ ເພາະກາງຫາວ ແລະ ກາລະເວລາຫລືວ່າແມ່ນຮູບແບບຂອງຈິດສຳນຶກ ຫລືວ່າເກີດມີຂຶ້ນມາດ້ວຍ ຈິດສຳນຶກ.

ລັດທິວັດຖຸນິຍົມຢືນຢັນວ່າ ໂລກຄົງຢູ່ພາຍນອກພວກເຮົາ ຫມາຍຄວາມວ່າ ຄົງຢູ່ໃນກາງຫາວ. ໂລກຄົງຢູ່ຢ່າງຕະຫລອດການ ເພາະບໍ່ມີຜູ້ໃດ ແລະ ບໍ່ມີສິ່ງໃດເປັນຜູ້ໃຫ້ກຳເນີດແກ່ມັນ. ອັນນີ້ຫມາຍຄວາມວ່າ ມັນຄົງຢູ່ໃນກາລະເວລາ ເພາະຕະຫລອດການນັ້ນ ແມ່ນກາລະເວລາທີ່ບໍ່ມີຂອບເຂດ, ບໍ່ມີຈຸດເລີ່ມ ກໍບໍ່ມີຈຸດສິ້ນສຸດ.

ຫນ່ວຍໂລກໄດ້ຄົງຢູ່ໃນກາງຫາວ ແລະ ໃນກາລະເວລາແຕ່ຍັງບໍ່ມີຄົນຈັກຄົນ ແລະ ບໍ່ມີຈິດສຳນຶກໃດໆ. ດວງຕາເວັນ, ຫນ່ວຍໂລກ ແລະ ດວງດາວອື່ນໆໄດ້ເກີດຂຶ້ນມາຈາກທາດທີ່ມີມາກ່ອນການກຳເນີດຂອງຫນ່ວຍໂລກນັ້ນ ຕັ້ງແຕ່ດົນນານພຸ້ນ. ສ່ວນກະໂຕທາດນີ້ ກໍ່ມີທາດອື່ນກ່ອນທີ່ໄດ້ໃຫ້ການລິເລີ່ມ ແກ່ມັນເອງ ແລະ ດັ່ງນີ້ຕໍ່ ໄປຢ່າງບໍ່ສຸດບໍ່ສ້ຽງ.

ວັດຖຸ ແລະ ບັນດາຮູບແບບຂອງມັນ ເຊັ່ນການເຄື່ອນເຫນັງ, ກາງຫາວ ແລະ ກາລະເວລານັ້ນ ເປັນສິ່ງທີ່ຕະຫລອດການ ເພາະຖ້າໃນກໍລະນີອື່ນແລ້ວ ຈຳຕ້ອງເລີ່ມຈາກການທີ່ວ່າ ພວກມັນໄດ້ກໍ່ຕັ້ງຂຶ້ນມາຈາກບໍ່ມີຫຍັງ. ແຕ່ຈາກບໍ່ມີຫຍັງ ກໍ່ບໍ່ມີຫຍັງເກີດຂຶ້ນມາ. ບາງຄັ້ງບາງຄາວປະກົດຄືວ່າສິ່ງວັດຖຸໄດ້ ສູນຫາຍໄປ ຢ່າງບໍ່ມີຮ່ອງຮອຍ ຄືກັນກັບວ່າມັນໄດ້ກາຍເປັນບໍ່ແມ່ນຫຍັງ. ຫາກ

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ, ເຫລັ້ມ ໑໘, ຫນ້າ ໑໘໑.

ແຕ່ໃນຕົວຈິງແລ້ວ ມັນບໍ່ແມ່ນການສູນຫາຍໄປ ແຕ່ແມ່ນການປ່ຽນທາດ ທີ່ປະກອບເປັນສິ່ງວັດຖຸນັ້ນ ກາຍເປັນທາດໃໝ່ ໃນເມື່ອປະລິມານລວມຂອງວັດຖຸບໍ່ປ່ຽນແປງ ບໍ່ຫລຸດຜ່ອນ ແລະ ກໍບໍ່ເພີ່ມຂຶ້ນແມ່ນແຕ່ລັກນ້ອຍ.

ຕົວຢ່າງໃນເມື່ອຈູດນ້ຳມັນແອັດຊັງ ປະກົດວ່າບໍ່ມີຫຍັງຄົງຄ້າງ ບໍ່ມີຮອດຂີ້ເຖົ່າ. ຖ້າ ຫາກຖອກແອັດຊັງໃສ່ໃນພາຊະນະທີ່ອັດແໜ້ນ, ສົມມຸດວ່າ ຖອກໃສ່ໃນບົ້ງແລ້ວຈອດປາກ ແລະ ຈູດມັນໃນນັ້ນ ແມ່ນວ່ານ້ຳໜັກຂອງບົ້ງ ຈະບໍ່ປ່ຽນແປງ ເພາະວ່ານ້ຳໜັກລວມຂອງນ້ຳມັນແອັດຊັງ ແລະ ອົກຊີແຊນທີ່ເຂົ້າຮ່ວມໃນການໄໝ້ ແລະ ນ້ຳໜັກລວມຫລັງຈາກໄໝ້ແລ້ວ ຄືອົກຊີດກາກບອນ ແລະ ນ້ຳນັ້ນຈະເທົ່າກັນ. ຈະເປັນເຊັ່ນດຽວກັນໃນເມື່ອພວກເຮົາຖົມນ້ຳຕານກ້ອນລົງໃສ່ຈອກນ້ຳຊາ ນ້ຳຕານຈະເປື່ອຍ ແລະ ພວກເຮົາຈະບໍ່ເຫັນມັນອີກ. ຖ້າຫາກຊັ່ງເບິ່ງແລ້ວ ແມ່ນວ່ານ້ຳໜັກຂອງນ້ຳຊາຫວານຈະເທົ່າກັນກັບ ຜົນບວກຂອງນ້ຳໜັກຂອງຈອກ, ນ້ຳ, ຊາ ແລະ ນ້ຳຕານລວມເຂົ້າກັນ.

ເຖິງຈະມີການປ່ຽນແປງແບບໃດກໍ່ຕາມ ແຕ່ປະລິມານຂອງວັດຖຸຍັງຮັກສາຄົງເດີມ; ໃນການປ່ຽນແປງດ້ານຄຸນນະພາບຂອງທາດ, ປະລິມານຂອງມັນທີ່ເຂົ້າຮ່ວມໃນການປ່ຽນແປງດັ່ງກ່າວຍັງຮັກສາຄົງເດີມ ໂດຍບໍ່ມີການປ່ຽນແປງ. ສະພາບດັ່ງດຽວກັນນີ້ຍັງຮັກສາໄວ້ ໃນເມື່ອການປ່ຽນແປງນັ້ນແມ່ນການ ປ່ຽນແປງທີ່ໃຫຍ່ໂຕມະຫຶມາ ທີ່ດຳເນີນໄປໃນໂລກຈັກກະວານ ແລະ ໃນເມື່ອການປ່ຽນແປງນັ້ນດຳເນີນໄປໃນສິ່ງທີ່ນ້ອຍທີ່ສຸດ ເຊັ່ນຕົວຢ່າງ ພາຍໃນປະລະມານູທີ່ຕາເຮົາບໍ່ສາມາດແນມເຫັນໄດ້: ວັດຖຸປ່ຽນແປງຮູບແບບຢ່າງບໍ່ຢຸດຢັ້ງ, ແຕ່ມັນ ບໍ່ເກີດຂຶ້ນມາໃໝ່, ບໍ່ມີຜູ້ໃດ ແລະ ກໍບໍ່ມີສິ່ງໃດກໍ່ຕັ້ງ ແລະ ປັ້ນແຕ່ງມັນຂຶ້ນມາ ມັນເປັນສິ່ງທີ່ບໍ່ສາມາດຈະດັບສູນໄດ້. ກົດເກນຮັກສາຄົງເດີມຂອງວັດຖຸ, ລັກສະນະບໍ່ອາດຈະປັ້ນແຕ່ງແລະດັບສູນມັນໄດ້ນັ້ນ ຢັ້ງຢືນເຖິງລັກສະນະ-ຕະຫລອດການຂອງວັດຖຸ ແລະ ດັ່ງນັ້ນເອງ ລັກສະນະຕະຫລອດການຂອງ ຮູບການຄົງຢູ່ຂອງວັດຖຸ, ເຊັ່ນກາລະເວລາ ທີ່ບໍ່ມີຈຸດເລີ່ມຕົ້ນ ແລະ ບໍ່ມີຈຸດ ສິ້ນສຸດ, ພາວະຕະຫລອດການນັ້ນແມ່ນກາລະເວລາທີ່ບໍ່ມີຂອບເຂດ.

ພາວະຕະຫລອດການຍັງແຜ່ຂະຫຍາຍໄປເຖິງການເຄື່ອນເໜັງແລະກາງຫາວເຊັ່ນດຽວກັນ. ເຊັ່ນດຽວກັນກັບກາລະເວລາ ກາງຫາວ ເປັນສິ່ງທີ່ ບໍ່ມີຂອບເຂດ. ຟ.ອັງແກນ ເຄີຍເວົ້າວ່າ ອັນນີ້ມັນໝາຍເຖິງວ່າບໍ່ມີການສິ້ນສຸດ

ໄປທາງໃດເລີຍ ຈະໄປໜ້າຫລືຖອຍຫລັງ ຈະຂຶ້ນເທິງຫລືລົງລຸ່ມ ຈະເດີນ - ຊ້າຍ ຫລືໄປຂວາ ແລະ ສາມາດເອົາ ສິ່ງວັດຖຸຈຳນວນຫລວງຫລາຍຈົນ ບໍ່ອາດຄະນານັບໄດ້ເຊື່ອມເຂົ້າກັບສິ່ງວັດຖຸໃດໜຶ່ງ.ວິທະຍາການດາລາສາດສະໄໝໃໝ່ ເຊັ່ນກ້ອງສ່ອງດາລາສາດ, ກ້ອງສ່ອງວິທະຍຸ-ດາລາສາດ , ອຳນວຍໃຫ້ຄົ້ນຄວ້າກາງຫາວຈັກກະວານ ເຊິ່ງແສງສະຫວ່າງເຄື່ອນຍ້າຍ ດ້ວຍຄວາມໄວ ໓໐໐.໐໐໐ ກິໂລແມັດ ຕໍ່ວິນາທີ ຕ້ອງໃຊ້ເວລາເຄື່ອນຍ້າຍ ເຖິງ ໑໐ ພັນລ້ານປີຫລືຫລາຍກວ່ານັ້ນ. ເຖິງຈະເປັນຕົວເລກອັນມະຫັດສະຈັນ ກໍ່ຕາມ ແຕ່ຍ້ອນມີການປະດິດສ້າງອຸປະກອນທັນສະໄໝ ໄລຍະດັ່ງກ່າວນີ້ຍັງ-ສືບຕໍ່ເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ, ແລະ ເຂດແດນທີ່ສາມາດຕິດຕາມເບິ່ງ ໃນໂລກຈັກກະວານນັ້ນ ກໍເພີ່ມທະວີຂຶ້ນ ແລະ ການເພີ່ມທະວີດັ່ງກ່າວນີ້ ບໍ່ມີຂອບເຂດ. ປະຈຸບັນນີ້ບັນດານັກດາລາສາດໄດ້ຄົ້ນພົບໝູ່ດວງດາວຫລາຍພັນລ້ານ-ໝູ່; ແລະ ໃນໝູ່ດວງດາວແຕ່ລະ ໝູ່ ມີດວງດາວຫລາຍພັນລ້ານໜ່ວຍ ທີ່ແຕກຕ່າງກັນດ້ານຂະໜາດ ແລະ ຄວາມສະຫວ່າງ.ໃນໄລຍະສຸດທ້າຍຢູ່ເຂດສາຍແດນຂອງຈັກກະວານ ທີ່ຄົນເຮົາສາມາດແນມເຫັນໂດຍຜ່ານກ້ອງສ່ອງນັ້ນ ເພິ່ນໄດ້ຄົ້ນພົບກຸ່ມດວງດາວ ທີ່ມີຮູບຊົງຄືກັບກົ້ນຫອຍທີ່ໃຫຍ່ໂຕມະຫຶມາ.ໃນກຸ່ມດວງດາວນີ້ມີຈຳນວນໝູ່ດວງດາວຢ່າງຫລວງຫລາຍ ແລະ ຈຳນວນດວງດາວເຫລົ່ານີ້ກໍຍິ່ງຫລາຍ ກວ່າໝູ່ດວງດາວເຫລົ່ານັ້ນອີກ.

ກາງຫາວ ມີລັກສະນະສະເພາະສຳລັບມັນ ຄືລັກສະນະສາມຂະໜາດ ທີ່ໝາຍເຖິງວ່າ ທຸກໆສິ່ງວັດຖຸມີສາມຂະໜາດ: ລວງສູງ, ລວງກວ້າງ ແລະ ລວງຍາວ. ຈຳນວນຂະໜາດຂອງກະໂຕສິ່ງວັດຖຸນັ້ນ ສອດຄ່ອງກັບຄວາມສາມາດຂອງສິ່ງວັດຖຸເຄື່ອນຍ້າຍໄປໃນສາມທິດທາງ ເຊິ່ງພວກເຮົາສາມາດວາດພາບໄດ້ໂດຍໃຊ້ເສັ້ນຊີ້ທາງຕັ້ງສາກ ຊຶ່ງກັນແລະກັນ ສາມເສັ້ນ. ວ.ອີ. ເລນິນ ເຄີຍເວົ້າວ່າ ແຕ່ລະສິ່ງວັດຖຸແຕ່ລະເມັດຂອງທາດ ແມ່ນຈະເປັນເມັດຈົນພວກເຮົາແນມບໍ່ເຫັນກໍຕາມ ຕ້ອງຄົງຢູ່ໃນກາງຫາວໂດຍມີສາມຂະໜາດ.

ໂດຍແຕກຕ່າງກັບກາງຫາວ ກາລະເວລາມີພຽງແຕ່ຂະໜາດດຽວ: ມັນດຳເນີນໄປໃນທິດທາງດຽວຄືຈາກອະດີດ ຜ່ານປະຈຸບັນ ໄປເຖິງອະນາຄົດ . ມັນບໍ່ສາມາດເດີນໄປທາງທິດກົງກັນຂ້າມ ຈາກອະນາຄົດຜ່ານປະຈຸບັນໄປເຖິງອະດີດ ເວລາບໍ່ອາດກັບຕາວຄືນຫລັງໄດ້.

ແ ການວັດແທກດ້ານດຽວ ລັກສະນະບໍ່ອາດກັບຕ່າວຄືນຫລັງໄດ້ຂອງ ເວລາສະແດງຕົວອອກເປັນລຳດັບອັນແນ່ນອນ ໃນການສ້າງຕັ້ງບາງຮູບແບບ ຂອງການເຄື່ອນເໜັງຂອງວັດຖຸ ໃນເມື່ອຮູບແບບການເຄື່ອນເໜັງລະດັບຕ່ຳເປັນພື້ນຖານໃຫ້ແກ່ຮູບແບບການເຄື່ອນເໜັງລະດັບສູງກວ່າ ແລະ ສັບສົນກວ່າ . ຮູບແບບການເຄື່ອນເໜັງແບບຊີວະ ເຊິ່ງມີຕົວແທນຄືສິ່ງທີ່ມີຊີວິດທັງຫລາຍໄດ້ເກີດມີຂຶ້ນມາລູນຮູບແບບການເຄື່ອນເໜັງແບບເຄມີ ແລະ ເກີດມີຂຶ້ນມາ ບົນພື້ນຖານຂອງມັນ. ສ່ວນສັງຄົມໄດ້ເກີດມີຂຶ້ນມາ ໃນເມື່ອຮູບແບບການ ເຄື່ອນເໜັງແບບຊີວະມີລັກສະນະສັບສົນຂຶ້ນກວ່າເກົ່າ ແລະ ນຳໄປເຖິງການ ກຳເນີດຂອງຄົນ. ພວກເຮົາບໍ່ສາມາດຄົ້ນພົບລຳດັບແບບອື່ນ ແລະ ລຳດັບ ແບບທາງປີ້ນໃນທຳມະຊາດ ແລະ ຄົນ ຕະຫລອດທັງຈິດສຳນຶກຂອງຄົນທີ່ເປັນພາກສ່ວນໜຶ່ງຂອງທຳມະຊາດນັ້ນບໍ່ສາມາດບັງຄັບໃຫ້ທຳມະຊາດເດີນໄປຕາມ ລຳດັບແບບທາງປີ້ນດັ່ງກ່າວນີ້ໄດ້.

ວັດຖຸຢູ່ນອກກາງຫາວ ແລະ ກາລະເວລານັ້ນ ບໍ່ມີແລະບໍ່ອາດຈະເປັນໄປໄດ້, ເຊັ່ນດຽວກັນກັບບໍ່ມີກາງຫາວ ແລະ ກາລະເວລາໂດຍປາສະຈາກວັດຖຸ, ແລະ ຄົງຢູ່ດ້ວຍຕົນເອງໄດ້. ກາງຫາວທີ່ບໍ່ມີວັດຖຸນັ້ນ ພວກເຮົາພຽງແຕ່ ສົມມຸດຂຶ້ນເທົ່ານັ້ນ, ແຕ່ວ່າໃນຕົວຈິງບໍ່ມີກາງຫາວ "ຫວ່າງເປົ່າ" ບໍ່ມີກາງຫາວທີ່ປາສະຈາກວັດຖຸ, ກາງຫາວທັງໝົດເຕັມໄປດ້ວຍວັດຖຸ. ກາລະເວລາກໍ່ ເປັນເຊັ່ນດຽວກັນ ໃນຖານະເປັນໄລຍະ, ລຳດັບຂອງຂະບວນວິວັດຂອງວັດຖຸ ມັນເຕັມໄປດ້ວຍສິ່ງວັດຖຸ, ດ້ວຍການປ່ຽນແປງຂອງສິ່ງວັດຖຸ.

ທັດສະນະຂອງລັດທິວັດຖຸນິຍົມອະພິທຳ ກ່ຽວກັບທຳມະຊາດຂອງກາງຫາວ ແລະ ກາລະເວລານັ້ນ ສະແດງອອກຢ່າງຄົບຊຸດກວ່າໝູ່ໃນທິດສະດີຂອງ ນິວເຕີນ ທີ່ຖືວ່າ ກາງຫາວ ແລະ ກາລະເວລາເປັນສິ່ງທີ່ບໍ່ຂຶ້ນນຳກັນ ແລະ ບໍ່ຂຶ້ນກັບວັດຖຸທີ່ເຄື່ອນເໜັງ. ຕາມຄວາມເຫັນ ຂອງທ່ານແລ້ວ ພວກມັນ ແມ່ນສະຖານທີ່ຫວ່າງເປົ່າສຳລັບບັນຈຸສິ່ງວັດຖຸ ແລະ ຂະບວນວິວັດ.

ລັດທິວັດຖຸນິຍົມສັດຈະວິພາກ ຊີ້ແຈງເຖິງສາຍພົວພັນອັນແໜ້ນແຟ້ນ ລະຫວ່າງກາງຫາວ ແລະ ກາລະເວລາ ແລະ ສາຍພົວພັນລະຫວ່າງພວກມັນກັບວັດຖຸທີ່ເຄື່ອນເໜັງ. ທຸກໆການເຄື່ອນເໜັງທີ່ດຳເນີນໄປໃນກາລະເວລານັ້ນຍາມໃດກໍ່ລ້ວນແຕ່ແມ່ນການເຄື່ອນເໜັງທີ່ດຳເນີນໄປໃນກາງຫາວ. ຄວາມ

ເປັນເອກະພາບລະຫວ່າງກາງຫາວ ແລະ ກາລະເວລາ ໄດ້ສະແດງອອກໃນຄວາມຮັບຮູ້ກ່ຽວກັບ "ຄວາມໄວ". ຄວາມ ໄວແມ່ນໄລຍະທາງ (ກາງຫາວ) ທີ່ສິ່ງວັດຖຸໄດ້ເຄື່ອນຍ້າຍໃນຫົວໜ່ວຍເວລາ.

ລັກສະນະສະເພາະດ້ານກາງຫາວ ແລະ ກາລະເວລາຂອງເປົ້າ ໝາຍວັດຖຸບໍ່ແມ່ນລັກສະນະຄົງທີ່, ບໍ່ແມ່ນລັກສະນະຄ້າຍຄືກັນໃນທຸກກາລະ ແລະເທສະ, ມັນປ່ຽນແປງໂດຍອີງກັບລັກສະນະຂອງການເຄື່ອນເໜັງທີ່ມີ ສະເພາະແຕ່ເປົ້າໝາຍເທົ່ານັ້ນ. ການອີງຕໍ່ກັນເຊັ່ນນີ້ໄດ້ຮັບການອະທິບາຍຢ່າງ ແຈ່ມແຈ້ງເປັນພິເສດໃນທິດສະດີທຽບຖານຂອງອາ. ແອງສະແຕງ. ຕົວຢ່າງຖ້າຫາກຫົວຈະຫລວດບັນລຸຄວາມໄວຢ່າງສູງແລ້ວ ໃນຂະນະທີ່ຄວາມ ໄວຂອງ ຈະຫລວດເພີ່ມທະວີຕື່ມອີກ, ຄວາມຍາວຂອງມັນຈະຫລຸດຜ່ອນລົງ ຖ້າທຽບໃສ່ - ໜ່ວຍໂລກ ແລະ ການເດີນຂອງເວລາໃນຫົວຈະຫລວດຈະຊ້າລົງ. ລະຫວ່າງການຫລຸດຜ່ອນຄວາມຍາວ (ກາງຫາວ) ແລະການເດີນຊ້າລົງຂອງເວລາ ມີການພົວພັນແບບອີງຕໍ່ກັນຢ່າງເຂັ້ມງວດ ການພົວພັນນີ້ຊີ້ແຈງໃຫ້ເຫັນ ຄວາມເປັນເອກະພາບລະຫວ່າງກາງຫາວ ແລະ ກາລະເວລາ. ທິດສະດີທຽບຖານເຈາະຈົງການທີ່ວ່າ ພ້ອມກັນກັບການເພີ່ມທະວີມວນສານຂອງສິ່ງວັດຖຸ ແລ້ວກາງຫາວທີ່ຕິດກັບມັນນັ້ນ ຍິ່ງເພີ່ມລັກສະນະກົ່ງ ແລະ ເວລາເດີນຊ້າລົງໄປ. ຄວາມຖືກຕ້ອງຂອງຂໍ້ສະຫລຸບໃນທິດສະດີທຽບຖານ ທີ່ໄດ້ຊີ້ແຈງເຖິງສາຍ ພົວພັນເຊິ່ງກັນແລະກັນ ລະຫວ່າງວັດຖຸ ການເຄື່ອນເໜັງ ກາງຫາວ ແລະກາລະເວລານັ້ນໄດ້ຮັບການຢັ້ງຢືນດ້ວຍການທົດລອງຕົວຈິງ.

ກາງຫາວ ແລະ ກາລະເວລາໄດ້ເຜີຍໃຫ້ເຫັນສັດຈະວິພາກຂອງ ຄວາມເປັນເອກະພາບລະຫວ່າງສິ່ງ ເດັດຖານ ແລະ ທຽບຖານ. ພວກມັນເປັນສິ່ງເດັດຖານໃນຄວາມໝາຍທີ່ວ່າ ພວກມັນປະກອບເປັນຮູບແບບການດຳລົງ ຄົງຕົວຂອງທຸກໆປະກົດການໂດຍບໍ່ມີກໍລະນີຫລີກເວັ້ນ ແລະ ບໍ່ມີຜູ້ໃດແລະບໍ່ມີ ສິ່ງໃດ ປັ້ນແຕ່ງ ພວກມັນຂຶ້ນມາ. ພວກມັນເປັນສິ່ງທີ່ຄົງຕົວຢ່າງຕະຫລອດ ການເຊັ່ນດຽວກັນກັບວັດຖຸທີ່ເຄື່ອນເໜັງ ພວກມັນເປັນສິ່ງທຽບຖານ ໃນຄວາມ - ໝາຍທີ່ວ່າ ໃນບັນດາລັກສະນະຕົວຈິງ ແລະ ລະອຽດຂອງມັນຂຶ້ນກັບຈຸດພິ - ເສດຂອງສິ່ງວັດຖຸທີ່ເຄື່ອນເໜັງ.

ດ້ວຍນີ້ ລັດທິວັດຖຸນິຍົມສັດຈະວິພາກໄດ້ພິສູດຢ່າງໜັກແໜ້ນຕໍ່ສິ່ງທີ່ວ່າໂລກ

ຮອບຕົວພວກເຮົານັ້ນ ແມ່ນວັດຖຸທີ່ຄົງຢູ່ພຽງແຕ່ໃນການເຄື່ອນເໜັງ, ໃນກາງ
ຫາວ ແລະ ກາລະເວລາ. ນອກຈາກວັດຖຸແລ້ວ ໃນໂລກນີ້ບໍ່ມີຫຍັງອີກ.

## ພາກທີ ສາມ

## ວັດຖຸແລະຈິດສຳນຶກ. ຕົ້ນກຳເນີດແລະ ທາດແທ້ຂອງຈິດສຳນຶກ

### ໑. ການພົວພັນກັນ ລະຫວ່າງວັດຖຸແລະ ຈິດສຳນຶກ. ທາດແທ້ຂອງຈິດສຳນຶກ

ຈິດສຳນຶກແມ່ນຫຍັງ, ທຳມະຊາດຂອງມັນເປັນຄືແນວໃດ ? ມັນກຳເນີດຂຶ້ນມາຢ່າງໃດ ? ຈິດສຳນຶກຂອງຄົນ ແລະ ຈິດຕະສາດຂອງສັດ ມີການແຕກຕ່າງກັນຄືແນວໃດ ? ສາມາດສ້າງກົນຈັກເຕັກນິກທີ່ມີຈິດສຳນຶກຫລືບໍ່ ! ນີ້ແມ່ນຄຳຖາມທີ່ໄດ້ຕັ້ງຂຶ້ນໃນການຄົ້ນຄວ້າບັນຫາປັດຊະຍາກ່ຽວກັບຈິດສຳນຶກ.

ຄຳຕອບ ຕໍ່ຄຳຖາມດັ່ງກ່າວນີ້ ມີການພົວພັນຢ່າງແໜ້ນແຟ້ນ ກັບການແກ້ໄຂບັນຫາພື້ນຖານຂອງປັດຊະຍາ ຄືບັນຫາກ່ຽວກັບສາຍພົວພັນລະຫວ່າງ ວັດຖຸແລະຈິດສຳນຶກ.

ລັດທິວັດຖຸນິຍົມສັດຈະວິພາກ ອີງໃສ່ຫລັກຖານ ວິທະຍາສາດ ແລະ ພຶດຕິກຳຕົວຈິງຢັ້ງຢືນວ່າ ວັດຖຸເປັນສິ່ງມີມາກ່ອນ ຈິດສຳນຶກມີມາລູນຫລັງ. ຈິດສຳນຶກມີມາລູນຫລັງນັ້ນ ມີລັກສະນະປະຫວັດສາດ. ວັດຖຸມີຢູ່ຢ່າງຖາວອນ, ແລະຈິດສຳນຶກ ກຳເນີດຂຶ້ນມາພຽງແຕ່ໃນເງື່ອນໄຂທີ່ແນ່ນອນ ແລະ ມີຈຸດເລີ່ມໃນການລະເວລາ. ຕາມການຄຳນວນແບບທັນສະໄໝ ສ່ວນຫລວງຫລາຍນັ້ນ - ໜ່ວຍໂລກຄົງຢູ່ ໃນຖານະເປັນດວງດາວ ນັບເປັນເວລາລະຫວ່າງ ໔ ຫາ ໖ ພັນລ້ານປີ. ຊີວິດເທິງໜ່ວຍໂລກໄດ້ກຳເນີດຂຶ້ນມາກວ່າ ໑,໕ ພັນລ້ານປີ ແລະຄົນເລີ່ມຕົ້ນແຍກອອກຈາກໂລກຂອງສັດນັ້ນ ພຽງແຕ່ລະຫວ່າງ ໒ - ໓ ລ້ານປີກ່ອນໜ້ານີ້ເທົ່ານັ້ນ. ໃນດ້ານຄວາມຮັບຮູ້ ຈິດສຳນຶກກໍ່ເກີດລູນຫລັງ - ເຊັ່ນດຽວກັນ. ວັດຖຸແມ່ນກົກເຫງົ້າຂອງທຸກສິ່ງທີ່ມີໃນຈິດສຳນຶກ. ທຸກສິ່ງທີ່ ມີໃນຈິດສຳນຶກຂອງພວກເຮົານັ້ນ ແມ່ນການສ່ອງແສງໂລກພາຍນອກໂດຍກົງຫລືໂດຍທາງອ້ອມ.

ຫລັກການວັດຖຸມີມາກ່ອນ ແລະ ຈິດສຳນຶກມີມາລູນຫລັງ ນັ້ນແມ່ນ ຫລັກ

ການລວມສຳລັບລັດທິວັດຖຸນິຍົມທຸກໆຮູບແບບ. ປັດຊະຍາ ມາກ ໄດ້ປະ ກອບສິ່ງໃໝ່ອັນໃດແດ່ ເຂົ້າໃນການແກ້ໄຂບັນຫາກ່ຽວກັບການພົວພັນລະຫວ່າງວັດຖຸ ແລະ ຈິດສຳນຶກ.

ຂໍ້ທີໜຶ່ງ ລັດທິວັດຖຸນິຍົມສັດຈະວິພາກ ຖືວ່າຈິດສຳນຶກ ບໍ່ແມ່ນລັກສະນະ-ສະເພາະຂອງວັດຖຸເວົ້າລວມ ແຕ່ແມ່ນຜະລິດຕະພັນ ຂອງການຂະຫຍາຍ ຕົວຂອງວັດຖຸ ໃນລະດັບອັນແນ່ນອນ. ອັນນີ້ແມ່ນລັກສະນະສະເພາະຂອງ ມັນສະໝອງຂອງຄົນ.

ຂໍ້ທີສອງ ຈິດສຳນຶກ ບໍ່ພຽງແຕ່ແມ່ນຜົນ ຂອງການຂະຫຍາຍຕົວຂອງວັດຖຸທາງດ້ານຊີວະສາດເທົ່ານັ້ນ ແຕ່ໃນຕົ້ນຕໍແລ້ວ ຍັງແມ່ນຜະລິດຕະພັນ ຂອງພຶດຕິກຳຕົວຈິງດ້ານປະຫວັດສາດ-ສັງຄົມ. ຈິດສຳນຶກມີລັກສະນະສັງຄົມ. ມັນກຳເນີດຂຶ້ນມາ ແລະ ຂະຫຍາຍຕົວໄດ້ພຽງແຕ່ໃນເງື່ອນໄຂຊີວິດຂອງສັງຄົມ ໃນການເຄື່ອນໄຫວອອກແຮງງານຂອງຄົນ. ຂໍ້ຄວາມດັ່ງກ່າວພິສູດດ້ວຍການ ໄຮ້ຈິດສຳນຶກ ຂອງເດັກນ້ອຍ ທີ່ຕົກຢູ່ໃນຝູງສັດ ຕັ້ງແຕ່ອາຍຸ ບໍ່ໄດ້ພໍເທົ່າໃດເດືອນ. ຕົວຢ່າງ ເມື່ອວັນທີ່ ໒໑ ເດືອນຕຸລາ ປີ ໑໙໒໐ ຢູ່ໃນປ່າທີ່ບໍ່ ຫ່າງຈາກບ້ານໜຶ່ງ ຢູ່ໃນອິນເດຍ ເພິ່ນໄດ້ພົບເຫັນເດັກຍິງສອງຄົນ ອາຍຸປະມານສອງປີ ແລະ ເກົ້າປີ. ເດັກທັງສອງໄດ້ຮັບການຕັ້ງຊື່ວ່າ ອາມາລາ ແລະກາມາລາ. ຫລັງຈາກນັ້ນບໍ່ດົນ ອາມາລາໄດ້ຕາຍໄປ ສ່ວນ ກາມາລາ ມີຊີວິດຢູ່ເຖິງ ໑໗ ປີ. ເຖິງວ່າໄດ້ມີວິທີການອົບຮົມແບບພິເສດກໍ່ຕາມ ແຕ່ຈິດສຳນຶກ-ແບບມະນຸດທົ່ວໄປຂອງນາງບໍ່ຂະຫຍາຍຕົວເລີຍ.ໃນປະຈຸບັນກໍ່ເຊັ່ນດຽວ ກັນເດັກເກີດໃໝ່ຈະບໍ່ສາມາດນຶກຄິດ ຖ້າຫາກເດັກບໍ່ໄດ້ພົວພັນກັບຜູ້ໃຫຍ່.

ຂໍ້ທີສາມ ປັດຊະຍາ ມາກ ແຜ່ຂະຫຍາຍຫລັກການດ້ານວັດຖຸອອກສູ່ ຂົງເຂດປະກົດການທາງສັງຄົມຄື: ການດຳລົງຄົງຕົວຂອງສັງຄົມມີມາກ່ອນ, ຈິດສຳນຶກຂອງສັງຄົມມີມາລຸນຫລັງ. ມີແຕ່ການອະທິບາຍຊີວິດສັງຄົມແບບວັດຖຸ ນິຍົມເທົ່ານັ້ນ ຈິ່ງສາມາດອະທິບາຍຢ່າງມີວິທະຍາສາດພົນຖານວັດຖຸ ( ການເຄື່ອນໄຫວອອກແຮງງານ) ຂອງການກຳເນີດ ການກໍ່ຕັ້ງ ແລະ ການ ຂະຫຍາຍຕົວຂອງຈິດສຳນຶກ.

ທາດແທ້ຂອງຈິດສຳນຶກ ນັ້ນເປັນຄືແນວໃດ ? ເຊັ່ນດຽວກັນກັບຄວາມຮັບຮູ້ກ່ຽວກັບວັດຖຸ ຈິດສຳນຶກ ກໍ່ແມ່ນຄວາມຮັບຮູ້ທາງປັດຊະຍາທີ່ກວ້າງຂວາງ .

ດ້ວຍເຫດນັ້ນ ພຽງແຕ່ຜ່ານການໄຈ້ແຍກການພົວພັນ ຂອງຈິດສຳນຶກກັບ ວັດຖຸ ເທົ່ານັ້ນ ເພິ່ນກໍສາມາດນິຍາມຈິດສຳນຶກໄດ້.

ພວກເຮົາຈຶ່ງມາໄຈ້ແຍກການພົວພັນຂອງຈິດສຳນຶກ ກັບມັນສະໝອງ - ເບິ່ງ .

ຈິດສຳນຶກ ແມ່ນລັກສະນະສະເພາະຂອງວັດຖຸທີ່ມີການຈັດຕັ້ງສູງ ( ຄືມັນສະໝອງ) ເພື່ອສ່ອງແສງໂລກພາຍນອກ ແລະ ສ້າງຮູບພາບຂອງໂລກ ດັ່ງກ່າວ. ຈິດສຳນຶກແມ່ນຜະລິດຕະພັນຂອງການເຄື່ອນໄຫວ ຂອງມັນສະ ໝອງ ມັນຄົງຢູ່ໃນຊົ່ວໄລຍະ ທີ່ມັນສະໝອງຍັງປະຕິບັດງານຢູ່. ໃນເມື່ອມັນ ສະໝອງຫາກພັງທະລາຍໄປແລ້ວ ຈິດສຳນຶກ ກໍສູນຫາຍໄປ. ມັນສະໝອງຂອງຄົນແມ່ນອະໄວຍະວະທີ່ສັບສົນທີ່ສຸດ ທີ່ສ້າງຂຶ້ນໂດຍທຳມະຊາດ. ພ້ອມ ກັນນັ້ນມັນຍັງແມ່ນຜະລິດຕະພັນ ຂອງການຂະຫຍາຍຕົວທາງດ້ານສັງຄົມ. ມັນ ປະກອບດ້ວຍ ຈຸລັງ ຄີເນີລົງ ທີ່ມີຈຳນວນເຖິງ ໑໐໐ ພັນລ້ານ. ເຍື່ອຫຸ້ມ ສະໝອງ ມີຄວາມໝາຍຕັດສິນຊີ້ຂາດ ສຳລັບຈິດສຳນຶກ ຂອງຄົນ.

ຈິດສຳນຶກ ພົວພັນກັບໂລກວັດຖຸພາຍນອກຄືແນວໃດ ? ຈິດສຳນຶກ ແມ່ນການສ່ອງແສງ ໂລກວັດຖຸແບບພາວະວິໄສ ໃນສະໝອງຂອງຄົນ. ໂລກ ກະທົບຕໍ່ຄົນ ແລະ ສ່ອງແສງອອກໃນມັນສະໝອງຂອງຄົນ ໃນຮູບແບບຂອງ ຈິດສຳນຶກ. ດັ່ງທີ່ ອີ.ມ.ເຊແຊນອຟ ນັກປາດລັດເຊຍໄດ້ຊີ້ແຈງໃຫ້ເຫັນ ວ່າຕັດຂາດຈາກຂ່າວສານພາຍນອກແລ້ວ ມັນສະໝອງຂອງຄົນ "ຫລັບໄປແລະເຊົາເຮັດວຽກ". ຈິດສຳນຶກແມ່ນຮູບພາບ, ການສຳເນົາແບບ, ການສ່ອງ ແສງໂລກວັດຖຸ. ຈິດສຳນຶກຍັງເປັນເຄື່ອງບັນຊາການເຄື່ອນໄຫວຂອງຄົນ.

ດັ່ງນີ້ ຈິດສຳນຶກ ແມ່ນຜະລິດຕະພັນຂອງການຂະຫຍາຍຕົວ ທາງດ້ານ ຊີວະສາດ ແລະ ທາງປະຫວັດສາດ-ສັງຄົມອັນຍາວນານ, ແມ່ນລັກສະນະ ສະເພາະລະດັບສູງສຸດ ຂອງມັນສະໝອງຂອງຄົນ, ແມ່ນການສ່ອງແສງທີ່ມີ ເປົ້າໝາຍແລະຕັ້ງໜ້າ ຂອງໂລກພາວະວິໄສ, ແມ່ນເຄື່ອງບັນຊາການເຄື່ອນໄຫວຂອງຄົນ.

ດັ່ງໄດ້ຊີ້ແຈງມາຂ້າງເທິງແລ້ວ ຈິດສຳນຶກ ແມ່ນຮູບພາບຂອງໂລກວັດຖຸ. ລັກສະນະສະເພາະແລະຈຸດພິເສດ ທາງດ້ານການຮັບຮູ້ຂອງຮູບພາບນີ້ ອັນໃດແດ່ ? ລັກສະນະທົ່ວໄປຂອງຮູບພາບນັ້ນໄດ້ແກ່ມະໂນພາບ. ມະໂນພາບ ສະ

ແດງລັກສະນະທາດແທ້ຂອງຈິດສຳນຶກ ໃນການພົວພັນກັບວັດຖຸ. ຖ້າຫາກວັດຖຸຄົງຢູ່ຢ່າງພາວະວິໄສແລ້ວ, ແມ່ນວ່າຈິດສຳນຶກບໍ່ມີການຄົງຢູ່ຢ່າງເປັນ ເອກະລາດ ໂດຍບໍ່ຂຶ້ນກັບໂລກວັດຖຸ. ທຸກໆສິ່ງວັດຖຸຂອງໂລກພາຍນອກ ລ້ວນແຕ່ຄົງຢູ່ໃນກາງຫາວ ແລະ ໃນກາລະເວລາ. ສ່ວນແນວຄິດນັ້ນບໍ່ມີທີ່ຕັ້ງໃນ ກາງຫາວ, ບໍ່ສາມາດຈະວັດແທກ, ຊັ່ງຊາ ແລະ ຈັບບາຍມັນໄດ້ ໝາຍ ຄວາມວ່າບໍ່ສາມາດຈະແຍງເບິ່ງດ້ວຍຄວາມຮູ້ສຶກໄດ້. ມັນບໍ່ມີເນື້ອໜັງມັງສາ ແລະ ຮ່າງກາຍ. ແຕ່ໃນຂະນະດຽວກັນນັ້ນ ວັດຖຸ ແລະ ຈິດໃຈ ແມ່ນສິ່ງທີ່ຕັດຂາດຈາກກັນບໍ່ໄດ້ຢ່າງເດັດຂາດ. ຕາມຄວາມເວົ້າຂອງ ມາກ ແລ້ວ ມະໂນພາບບໍ່ແມ່ນສິ່ງອື່ນໃດ ນອກຈາກວັດຖຸທີ່ໄດ້ເຄື່ອນຍ້າຍ ເຂົ້າໃນມັນສະໝອງ ຂອງມະນຸດ ແລະ ໄດ້ດັດປ່ຽນໃນມັນສະໝອງ.

ໃນຈິດສຳນຶກ ມີສິ່ງທີ່ຂຶ້ນກັບລັກສະນະສະເພາະຂອງຄວາມເປັນຈິງ ແລະ ຂຶ້ນກັບກະໂຕຄົນເອງ. ແມ່ນຫຍັງໃນຈິດສຳນຶກຂຶ້ນກັບລັກສະນະສະເພາະຂອງຄົນ (ໝາຍຄວາມວ່າລັກສະນະອັດຕະວິໄສຂອງມັນຢູ່ບ່ອນໃດ ?) ຂະ ບວນວິວັດ ຂອງຈິດສຳນຶກດຳເນີນໄປໃນມັນສະໝອງສະເໝີ ໝາຍຄວາມວ່າດຳເນີນໄປ ພາຍໃນຮ່າງກາຍ. ໃນຈິດສຳນຶກ ບໍ່ມີການສ່ອງແສງຄວາມເປັນຈິງທີ່ສົມບູນ ແລະ ຊັດເຈນຢ່າງເດັດຖານ, ໃນນັ້ນມີປັດໄຈຊຶ່ງຄົນພວມຮັບຮູ້ເຂົ້າໄວ້. ແຕ່ລະຄົນມັກສົນໃຈແຕ່ບາງດ້ານຂອງຄວາມເປັນຈິງ ເຊິ່ງເປັນດ້ານ ທີ່ຕົນພວມດຳເນີນການເຄື່ອນໄຫວ. ເລື່ອງນີ້ຂຶ້ນກັບຄວາມສົນໃຈ, ຄວາມຮູ້ , ອາລົມຈິດ ແລະ ນິດໄສໃຈຄໍຂອງຄົນ. ແຕ່ລະຄົນຮັບເອົາດົນຕີ, ປຶ້ມ, ຮູບແຕ້ມ ແລະອື່ນໆ ອັນເປັນສິ່ງແນວດຽວກັນ ແຕ່ຮັບເອົາຢ່າງແຕກຕ່າງກັນ. ວ.ອີ . ເລນິນ ໄດ້ຊີ້ແຈງວ່າ ຖ້າຫາກບໍ່ມີອາລົມຈິດຂອງຄົນແລ້ວ ແມ່ນບໍ່ເຄີຍມີ ບໍ່ມີ ແລະບໍ່ອາດຈະມີການຄົ້ນຫາສັດຈະທຳຂອງຄົນ. ອາລົມຈິດສົ່ງຜົນສະທ້ອນສ່ວນໃຫຍ່ໃສ່ການປະດິດສ້າງຂອງບັນດານັກປະພັນ ນັກແຕ້ມ ແລະ ນັກແຕ່ງເພງ. ການເຄື່ອນໄຫວປະຕິວັດຂອງ ມາກ ອັງແກນ ເລນິນ ເຕັມໄປດ້ວຍຄວາມຮັກປະຊາຊົນ ແລະ ຄວາມຄຽດຊັງພວກນາຍທຶນ.

ແມ່ນສິ່ງໃດໃນຈິດສຳນຶກ ຂຶ້ນກັບລັກສະນະສະເພາະ ຂອງຄວາມເປັນຈິງ (ໝາຍຄວາມວ່າ ລັກສະນະພາວະວິໄສຂອງມັນຢູ່ໃສ) ? ເນື້ອໃນ ຂອງຄວາມນຶກຄິດ ກຳນົດດ້ວຍສິ່ງທີ່ດຳເນີນໄປໃນຄວາມເປັນຈິງ ສິ່ງຊຶ່ງຄົນເປັນຜູ້

ສ່ອງແສງ. ອັນນີ້ແມ່ນເງື່ອນໄຂຂະຫຍາຍຕົວຂອງມະນຸດ ແມ່ນເງື່ອນໄຂ ດັດສ້າງໂລກຮອບຕົວຢ່າງມີຜົນ. ຈິດສຳນຶກແມ່ນສິ່ງທີ່ພາວະວິໄສຕາມຕົ້ນກຳເນີດຂອງມັນ ຄືໂລກພາຍນອກນັ້ນເຊັ່ນດຽວກັນ. ຈິດສຳນຶກບໍ່ເກີດຂຶ້ນມາໃນຫົວຄິດຂອງຄົນດ້ວຍຕົນເອງໄດ້ ມັນພຽງແຕ່ເກີດຂຶ້ນທ່າມກາງການກະທົບທີ່ສິ່ງ ວັດຖຸໃນໂລກພາຍນອກ ມີຕໍ່ອະໄວຍະວະຮູ້ສຶກຂອງຄົນເທົ່ານັ້ນ.

ດັ່ງນັ້ນ ຈິດສຳນຶກທີ່ມີລັກສະນະມະໂນພາບເປັນສິ່ງທີ່ພາວະວິໄສ ແລະອັດຕະວິໄສພ້ອມກັນ.

ຖ້າຫາກຄົນບໍ່ເລົ່າເຖິງແນວຄິດຂອງຕົນ ສູ່ຜູ້ອື່ນຟັງ ແມ່ນວ່າບໍ່ມີໃຜ ຈະຮູ້ເນື້ອໃນຂອງຮູບພາບ, ບໍ່ສາມາດຈະຖ່າຍທອດເອົາຮູບພາບໄດ້,ບໍ່ມີຜູ້ໃດ ຈະຕິດຕາມເບິ່ງມັນໄດ້,ບໍ່ສາມາດຈະຫມູນໃຊ້ເຄື່ອງຈັກເພື່ອຄົ້ນພົບມັນໄດ້ ແລະອື່ນໆ. ເຖິງແມ່ນພວກເຮົາຮູ້ແລ້ວວ່າ ອະໄວຍະວະແຫ່ງຈິດສຳນຶກ ແມ່ນ ມັນສະຫມອງກໍ່ຕາມ, ແຕ່ຖ້າຫາກຜ່າຕັດສະຫມອງອອກມາແລ້ວ ພວກເຮົາ ຈະບໍ່ພົບຈິດສຳນຶກແຕ່ປະການໃດ. ແຕ່ຈາກບ່ອນນີ້ຈະສະຫລຸບຄວາມວ່າ ບໍ່ມີຄວາມສາມາດຈະຮັບຮູ້ຈິດສຳນຶກ ນັ້ນ ແມ່ນບໍ່ຖືກຕ້ອງ, ເພິ່ນສາມາດຕີລາຄາເນື້ອໃນຂອງຈິດສຳນຶກ ໂດຍອີງໃສ່ປະກົດການຂອງມັນ, ອີງໃສ່ການເຄື່ອນໄຫວຂອງຄົນ. ການອອກແຮງງານຂອງຄົນມີລັກສະນະຈິດສຳນຶກ ແລະ ຖືກຕ້ອງ ຕາມເປົ້າຫມາຍ. ຈິດສຳນຶກສ່ອງແສງອອກໃນການກະທຳຂອງຄົນ, ໃນທ່າ ທາງແລະ ທ່າທີຂອງຄົນ. ຈິດສຳນຶກສະແດງຕົວອອກໂດຍຜ່ານພາສາຄວາມ ເວົ້າເປັນຕົ້ນ. ຄຳສັບຕິດພັນຢ່າງບໍ່ຂາດສາຍກັບແນວຄິດ ມັນສະແດງເຖິງແນວຄິດແຕ່ການສະແດງຄວາມນຶກຄິດ ແລະ ການສະແດງຄວາມຮູ້ສຶກຂອງຄົນບໍ່ຈຳກັດແຕ່ພຽງໃນຂົງເຂດທຳມະຊາດ ( ພາສາຂອງຊາດ ຂອງເຜົ່າຊົນ)ເທົ່ານັ້ນ. ໃນການຄົ້ນຄວ້າຈິດສຳນຶກ ມີການຫມູນໃຊ້ວິທີການສັງເກດດ້ວຍຕົນເອງ ເຊິ່ງໃນນັ້ນ ຄົນໄຈ້ແຍກແນວຄິດຄວາມເຂົ້າໃຈຂອງຕົນ ໄຈ້ແຍກເສັ້ນທາງທີ່ນຳໄປເຖິງ ການແກ້ໄຂຫນ້າທີ່ນັ້ນ ຫລື ຫນ້າທີ່ນີ້.

ໃນຈິດສຳນຶກເກີດມີສິ່ງທີ່ເອີ້ນກັນວ່າ ຈິດສຳນຶກດ້ວຍຕົນເອງ. ນີ້ຄືຄົນຮັບຮູ້ຕົນເອງວ່າເປັນບຸກຄົນ ຮັບຮູ້ທີ່ຕັ້ງຂອງຕົນໃນສັງຄົມ ຮັບຮູ້ແນວຄິດ ຄວາມຮູ້ສຶກ ແລະ ການກະທຳຂອງຕົນ. ຈິດສຳນຶກດ້ວຍຕົນເອງກໍ່ຕັ້ງຂຶ້ນມາທ່າມກາງການເຄື່ອນໄຫວສັງຄົມທີ່ມີຜົນດີຂອງຄົນ. ຄົນຕ້ອງຮັບຜິດຊອບຕໍ່ຊຸມນະພາບ -

ຂອງຄຳທີ່ວ່າ "ຕົນເອງ". ປະຈຸບັນນີ້ ໃນຊີວິດສັງຄົມທີ່ສັບສົນ ພວມມີການຕໍ່ສູ້ລະຫວ່າງແນວຄິດ ມາກ-ເລນິນ ຝ່າຍໜຶ່ງ ກັບ ແນວຄິດນາຍທຶນ ອີກ ຝ່າຍໜຶ່ງ. ນີ້ແມ່ນການຕໍ່ສູ້ເພື່ອຍາດແຍ່ງຄົນ. ຜົນຂອງການຕໍ່ສູ້ດັ່ງກ່າວ ຂຶ້ນກັບການທີ່ ຄົນຈະຄັດເລືອກເອົາທີ່ຕັ້ງໃນຊີວິດແນວໃດ ຂຶ້ນກັບຄຸນນະພາບຂອງຈິດສຳນຶກດ້ວຍຕົນເອງຂອງຄົນ.

ໃນການແກ້ໄຂບັນຫາກ່ຽວກັບການພົວພັນລະຫວ່າງ ວັດຖຸ ແລະ ຈິດ ສຳນຶກນັ້ນ ລັດທິວັດຖຸນິຍົມ ສັດຈະວິພາກ ກົງກັນຂ້າມກັບ ລັດທິຈິດຕະນິຍົມ ໃນທຸກໆຮູບແບບ ແຫ່ງການສະແດງຕົວຂອງມັນ (ເຊັ່ນ ສາສະໜາ, ລັດທິທະວິມູນນິຍົມ, ລັດທິວັດຖຸນິຍົມທຳມະດາ ).

ໂດຍພື້ນກັບຫລັກຖານວິທະຍາສາດ ແລະ ພຶດຕິກຳຕົວຈິງ ລັດທິຈິດຕະ ນິຍົມປະກາດວ່າ ຈິດສຳນຶກມີມາກ່ອນ ແລະ ວັດຖຸມີມາທີຫລັງ, ເປັນສິ່ງທີ່ເກີດມາຈາກຈິດສຳນຶກ. ຕາມການຢືນຢັນຂອງບັນດານັກຈິດຕະນິຍົມພາວະວິໄສ - (ເຊັ່ນ ປລາຕົງ, ເຮເກນ, ບັນດາຕົວແທນຂອງລັດທິ ໂທມິດແບບໃໝ່ ໃນສະໄໝປະຈຸບັນ ແລະ ອື່ນໆ ) ນັ້ນແມ່ນວ່າ "ວິນຍານຂອງໂລກ"," ແນວຄິດອັນເດັດຖານ" ຫລື ພະເຈົ້າແມ່ນພື້ນຖານຂອງໂລກ. ຕາມທັດສະນະຂອງລັດທິຈິດຕະນິຍົມອັດຕະວິໄສ (ເບີກເລ, ຕົວແທນຂອງລັດທິນິຍົມມາຊ, ພວກປະຕິຖານນິຍົມ ແລະ ອື່ນໆນັ້ນ) ໂລກແມ່ນການສັງລວມຄວາມຮູ້ສຶກ. ສະນັ້ນສິ່ງທີ່ຄົງຢູ່ຢ່າງເປັນຈິງນັ້ນມີແຕ່ "ຕົນເອງ" ແລະ ຄວາມຮູ້ສຶກຂອງຕົນເອງ.

ໃນການແກ້ໄຂບັນຫາພື້ນຖານຂອງປັດຊະຍານັ້ນ ລັດທິທະວິມູນນິຍົມ ກໍເຊື່ອມເຂົ້າກັບລັດທິຈິດຕະນິຍົມ.

ການຮັບຮູ້ວ່າມີຄວາມສາມາດຈະປັ້ນແຕ່ງທຳມະຊາດຂຶ້ນມາ ແລະ ລັກສະນະຕະຫລອດການຂອງຈິດໃຈນັ້ນ ແມ່ນຕັ້ງຢູ່ບົນພື້ນຖານ ໂລກະທັດ ທາງ ສາສະໜາ. ຈິດສຳນຶກຂອງຄົນ ຖືກຕັດແບ່ງອອກຈາກຮ່າງກາຍ ແລະ ຄົງຕົວຢູ່ແບບປັດໄຈທີ່ເປັນເອກະລາດ (ຄືຈິດໃຈ, ວິນຍານ ) ແລະ ຜູກພັນກັບຮ່າງກາຍໃນຮູບນອກເທົ່ານັ້ນ.

ລັດທິວັດຖຸນິຍົມ ສັດຈະວິພາກ ຕ້ານທັດສະນະທີ່ວ່າ ວັດຖຸ ແລະ ຈິດ ສຳນຶກ ເປັນສິ່ງທີ່ຄ້າຍຄືກັນ ໝາຍຄວາມວ່າ ຕ້ານລັດທິວັດຖຸນິຍົມທຳມະດາ . ຕົວແທນຂອງລັດທິວັດຖຸນິຍົມທຳມະດາປະກາດວ່າ ແນວຄິດແມ່ນວັດຖຸທີ່ ແລບ

ບາງທີ່ສຸດ, ວ່າແນວຄິດເປັນວັດຖຸ, ຈິດສຳນຶກແລະຂະບວນວິວັດທາງ ສິລະສາດ ຂອງມັນສະໜອງເປັນສິ່ງອັນດຽວກັນ. ວ.ອິ.ເລນິນ ໃຫ້ຂໍ້ສັງເກດ-ການວ່າ ຖ້າຫາກຮັບຮູ້ແນວຄິດເປັນວັດຖຸແລ້ວ ໝາຍຄວາມວ່າຍ້າຍບາດກ້າວທີ່ຜິດພາດ ໄປສູ່ການປົນເປລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມ.

## ໔. ຕົ້ນກຳເນີດແລະການຂະຫຍາຍຕົວ ຂອງ ຈິດສຳນຶກ

ຈິດສຳນຶກ ແມ່ນການສ່ອງແສງ. ແຕ່ການສ່ອງແສງບໍ່ແມ່ນຈະດຳ ເນີນ-ໄປໃນຮູບແບບຈິດສຳນຶກຢ່າງແນ່ນອນ.

ການສ່ອງແສງ ແມ່ນຄວາມສາມາດຂອງສິ່ງວັດຖຸຈຳນວນໜຶ່ງ ທີ່ລົ້ມ ຄືນຮູບພາບ ລັກສະນະສະເພາະຂອງສິ່ງວັດຖຸອື່ນ ໃນຮູບແບບນີ້ ຫລື ຮູບແບບນັ້ນໃນເວລາ ມັນກະທົບ ຊຶ່ງກັນແລະກັນ. ລັກສະນະສະເພາະໃນການສ່ອງແສງ-ນັ້ນ ແມ່ນລັກສະນະສະເພາະຂອງວັດຖຸທັງໝົດ ທັງວັດຖຸທີ່ມີຊີວິດ, ທັງວັດຖຸທີ່ບໍ່ມີຊີວິດ.

ໜ້າທີ່ສຳຄັນຂອງການສ່ອງແສງນັ້ນ ຄືໜ້າທີ່ອາດພາບຄືນ. ການ ສ່ອງແສງ ໃນຖານະເປັນລັກສະນະສະເພາະທົ່ວໄປຂອງວັດຖຸ ມີການຂະຫຍາຍຕົວທາງປະຫວັດສາດ ໂດຍໄປພ້ອມກັນກັບການຂະຫຍາຍຕົວຂອງຮູບແບບຂອງວັດຖຸ ແຕ່ງ່າຍດາຍ ກ້າວໄປສູ່ຮູບແບບສັບສົນ. ຮູບແບບການເຄື່ອນເໜັງ ຂອງວັດຖຸຍິ່ງມີລະດັບສູງ ແລະ ສັບສົນຂຶ້ນເທົ່າໃດ ຮູບແບບຂອງການສ່ອງແສງກໍ່ມີລະດັບສູງ ແລະ ສັບສົນຂຶ້ນເທົ່ານັ້ນ. ວິທະຍາສາດສະໄໝໃໝ່ ໄດ້ກຳນົດ-ຮູບແບບການສ່ອງແສງຄວາມເປັນຈິງຕໍ່ໄປນີ້: ການສ່ອງແສງທຳມະຊາດ ທີ່ບໍ່ມີຊີວິດ, ການສ່ອງແສງທຳມະຊາດທີ່ມີຊີວິດ ແລະ ການສ່ອງແສງສັງຄົມ.

ໃນວັດຖຸທີ່ບໍ່ມີຊີວິດ ລັກສະນະສະເພາະຂອງເປົ້າໝາຍນີ້ກະທົບໃສ່ ເປົ້າໝາຍນັ້ນ ສະແດງອອກໃນຮູບການມີລວດລາຍ, ຮ່ອງຮອຍ, ການປ່ຽນແປງພາວະການ, ການສົ່ງຄວາມຮ້ອນ, ສຽງກ້ອງໃນປ່າ, ໃນວິທະຍາການ ສະໄໝໃໝ່ສະແດງອອກໃນການປ່ຽນແປງເສັ້ນໝາຍຂອງເຄື່ອງວັດແທກ. ລັກ

ສະນະສະເພາະໃນການສ່ອງແສງຂອງທຳມະຊາດ ທີ່ບໍ່ມີຊີວິດນັ້ນ ໄດ້ຮັບການນຳໃຊ້ຢ່າງກວ້າງຂວາງໃນວິທະຍາການ ເຊັ່ນ ຕົວຢ່າງ ໃນການຖ່າຍຮູບ , ໂທລະພາບ, ຮູບເງົາ, ວິທະຍຸ.

ລະຫວ່າງວັດຖຸທີ່ບໍ່ມີຊີວິດ ແລະ ມີຊີວິດນັ້ນ ມີຄວາມເປັນເອກະພາບ ກັນຢ່າງບໍ່ຂາດສາຍ. ວັດຖຸທີ່ບໍ່ມີຊີວິດເປັນຕົ້ນກຳເນີດຢ່າງມີກົດເກນ ຂອງວັດຖຸທີ່ມີຊີວິດ. ພ້ອມກັນກັບການກຳເນີດຂອງຊີວິດ ໄດ້ເກີດມີຮູບແບບສ່ອງແສງໃຫມ່ດ້ານຄຸນນະພາບ. ຮູບແບບສ່ອງແສງທຳອິດ ໃນລະດັບວັດຖຸທີ່ມີຊີວິດນັ້ນ ແມ່ນການຕອບຕ້ານ ຄືເປັນລັກສະນະສະເພາະຂອງສິ່ງທີ່ມີຊີວິດ ທີ່ສ່ອງແສງ ການກະທົບ ຂອງບັນຍາກາດພາຍນອກ ດ້ວຍການກະທົບຕອບຢ່າງມີການເລືອກ - ເຟັ້ນ. ການຕອບຕ້ານແມ່ນລັກສະນະລວມ ຂອງທຸກໆປະກົດການທີ່ມີຊີວິດ, ແຕ່ສຳລັບສິ່ງມີຊີວິດ ເຊິ່ງຂາດລະບົບເສັ້ນປະສາດແລ້ວ ມັນແມ່ນຮູບແບບ ສ່ອງແສງທາງຊີວະສາດ ພຽງຮູບແບບດຽວເທົ່ານັ້ນ. ຕົວຢ່າງກໍຄືການເຕີບ ໃຫຍ່ຂອງພືດ, ໃນເມື່ອພາກສ່ວນສີຂຽວຂອງພືດ "ຢຶດຕົວ" ໄປສູ່ແສງສະ ຫວ່າງ (ການກະທົບຕໍ່ແສງຕາເວັນ) ຫລື ດອກໄມ້ "ຫຸບເຂົ້າ" ໃນຕອນຄ່ຳຫລືຕອນແລງ.

ລະດັບທີສອງ ຂອງການສ່ອງແສງໃນທຳມະຊາດ ທີ່ມີຊີວິດນັ້ນແມ່ນການ-ສ່ອງແສງທາງລະບົບປະສາດ ເຊິ່ງມີຮູບແບບເບື້ອງຕົ້ນຂອງມັນ ຄື ຄວາມ ຮູ້ສຶກ ໂດຍສອດຄ່ອງກັບ ຫ້າອະໄວຍະວະຮູ້ສຶກ ຄືການເຫັນ,ການໄດ້ຍິນ, ລົດຊາດ, ການດົມກິ່ນ, ການສຳຜັດ. ຄວາມສາມາດຂອງສັດທີ່ຮູ້ສຶກຕໍ່ສິ່ງ ແວດລ້ອມນັ້ນ ມີຄວາມສຳຄັນສຳລັບການປັບຕົວຂອງສັດ, ຖ້າຫາກບໍ່ມີຄວາມ ສາມາດດັ່ງກ່າວແລ້ວ ຊີວິດສັດກໍບໍ່ອາດຈະດຳເນີນໄປໄດ້.ສັດຈຳນວນຫລາຍ ສາມາດ ເຫັນ, ໄດ້ຍິນ, ດົມກິ່ນ ແລະ ສຳຜັດນັ້ນຢ່າງສູງ. ເຊັ່ນ ແຫລວແມ່ນເຫັນໄກກວ່າຄົນຕັ້ງຫລາຍເທົ່າ. ຫມາ ແລະ ຊ້າງ ມີຄວາມຮູ້ສຶກລະດັບ ສູງໃນການດົມກິ່ນ ແລະ ຫມາໃນ ມີຄວາມຮູ້ສຶກລະດັບສູງ ໃນການໄດ້ຍິນສຽງ. ສັດທີ່ມີວິນຍານ ຮູ້ສຶກມີຄວາມເຈັບປວດ, ຄວາມຢ້ານກົວ, ຄວາມເພິ່ງພໍໃຈ.

ພ້ອມກັນກັບການເກີດມີກົງຈັກສ່ອງແສງສະເພາະ ຄືລະບົບປະສາດນັ້ນໄດ້ເກີດມີການເຄື່ອນໄຫວພິເສດທີ່ຮັບໃຊ້ການສ່ອງແສງ, ກ່ອນອື່ນຫມົດອັນນີ້ແມ່ນການກະທົບຕອບຂອງສິ່ງມີຊີວິດ ຕໍ່ການກະທົບ, ຫມາຍຄວາມວ່າການສະທ້ອນ

ມີການສະທ້ອນທີ່ມີມາແຕ່ເກີດ ແລະ ການສະທ້ອນຢ່າງມີສະຕິໃນຊີວິດ. ການສະທ້ອນທີ່ມີມາແຕ່ເກີດ ຫລື ການສະທ້ອນທີ່ບໍ່ມີເງື່ອນໄຂ ເກີດຂຶ້ນມາ ທ່າມກາງການຂະຫຍາຍຕົວຂອງສິ່ງທີ່ມີຊີວິດປະເພດຕ່າງໆ ແລະ ສືບທອດ ກັນໄປຕາມເຊື້ອສາຍ (ເຊັ່ນ ການດູດ, ຈາມ ). ສັນຊາດຍານແມ່ນການສະທ້ອນແບບບໍ່ມີເງື່ອນໄຂທີ່ສັບສົນ. ນີ້ແມ່ນການກະທຳຂອງແມງມຸມ ທີ່ພວມສານໄຍ, ການກະທຳຂອງເຜິ້ງ ທີ່ທ້ອນໂຮມນ້ຳເຜິ້ງ ແລະ ເອົາມັນໄປມ້ຽນໃນຮັງເຜິ້ງ ນົກບິນອ້ານທະວີບຕາມເສັ້ນທາງໃດໜຶ່ງ ໃນຍາມລະດູບານໃໝ່ ແລະ ລະດູໃບໄມ້ຫລົ່ນ. ການສະທ້ອນທີ່ມີເງື່ອນໄຂຫລືການສະທ້ອນຢ່າງມີສະຕິໃນຊີວິດ-ເກີດມີຂຶ້ນມາໃນການຂະຫຍາຍຕົວຢ່າງເອກະລາດຂອງສິ່ງມີຊີວິດ, ອັນນີ້ເປັນການສະທ້ອນທີ່ອ່ອນໂຍນກວ່າ ແລະ ບໍ່ສືບທອດຕາມເຊື້ອສາຍ. ຖ້າຫາກການສະທ້ອນປະເພດທີໜຶ່ງ ສ່ອງແສງສາຍພົວພັນປະຈຳລະຫວ່າງສິ່ງມີຊີວິດກັບສິ່ງແວດລ້ອມແລ້ວ, ແມ່ນວ່າປະເພດທີສອງ ສ່ອງແສງສາຍພົວພັນຊົ່ວຄາວ.ຫາກແທ້ຂອງການສະທ້ອນທີ່ມີເງື່ອນໄຂນັ້ນສາມາດສະແດງອອກໃນຕົວຢ່າງທີ່ ງ່າຍດາຍຕໍ່ໄປນີ້. ໄຕໄຟອົ້ນກ່ອນແລ້ວຈຶ່ງເກືອໝາ. ຖ້າຫາກລົ້ມຄົນການທົດລອງດັ່ງນີ້ສອງສາມເທື່ອອີກແລ້ວ ແມ່ນວ່າພຽງແຕ່ໄຕ່ໄຟອົ້ນເທົ່ານັ້ນ ນ້ຳລາຍຂອງໝາ ກໍ່ຈະຍ້ອຍ ອອກມາໂລດ. ແຕ່ຖ້າຫາກບໍ່ສືບຕໍ່ເກືອເຂົ້າມສອງສາມເທື່ອແລ້ວ ກໍ່ຈະບໍ່ມີການສະທ້ອນດັ່ງນີ້ອີກ. ການສະທ້ອນທັງສອງປະເພດສ່ອງແສງເຖິງສັດຈະວິພາກຂອງການພົວພັນແບບປະຈຳ ແລະ ຊົ່ວຄາວ ລະຫວ່າງສິ່ງມີຊີວິດ ແລະ ສິ່ງແວດລ້ອມທຳມະຊາດ.

ດ້ວຍການຊ່ວຍເຫລືອຂອງການສະທ້ອນແບບມີເງື່ອນໄຂ ສັດເກີດມີຄວາມຊຳນິຊຳນານ ຄືໝາຍໍຂາຂຶ້ນ, ໝາເອົາສິ່ງຂອງໃດໜຶ່ງມາ, ໃນການ ຝຶກຊ້ອມ ສັດຊິນເຄີຍກັບຄວາມຊຳນິຊຳນານ ທີ່ມີຄວາມໝາຍຕົວຈິງຢ່າງ ໃຫຍ່ຫລວງ. ຮູບແບບການສ່ອງແສງລະດັບສູງຂອງສັດ (ຂອງລີງ) ນັ້ນແມ່ນ ປັນຍາ. ແຕ່ສັດບໍ່ຮັບຮູ້ການກະທຳຂອງຕົນ, ຖານະຂອງຕົນໃນຝູງ, ບໍ່ມີຈິດ ສຳນຶກ ແລະ ຈິດສຳນຶກດ້ວຍຕົນເອງ. ຕາມຄວາມນິຍາມຂອງ ອີ.ເປ.ປາວະ-ລົບ ນັກປາດລັດເຊຍແລ້ວ ອັນນີ້ແມ່ນຈິນຕະນາການ ທີ່ພວມປະຕິບັດການ , ແມ່ນຈິນຕະນາການທີ່ລະອຽດ. ອີ.ປປ.ປາວະລົບ ໄດ້ດຳເນີນ ການທົດລອງທະນີ ຣາຟາແອນ ໃນການມອດໄຟ. ໜ້າທີ່ດັ່ງນີ້: ຣາຟາແອນ ສາມາດ

ເອົາໝາກກ້ອຍໄດ້ພຽງແຕ່ຫຼັງຈາກມອດໄຟແລ້ວ. ໝາກກ້ອຍຕັ້ງຢູ່ ລະຫວ່າງກາງຫຼຽນໄຂທີ່ໄຕຮຽງຢູ່. ຢູ່ທາງຂ້າງນັ້ນມີນ້ຳກອົກ ແລະ ຈອກ. ເຄື່ອນໄຫວດ້ວຍວິທີການທົດລອງ ແລະ ຄວາມຜິດພາດ ຣາຟາແອນ ມອດໄຟ ແລະເອົາໝາກກ້ອຍອອກມາໄດ້. ຈາກການກະທຳຕົວຈິງ ໃນສະພາບການຕ່າງໆມັນມີການພົວພັນກັບການສະທ້ອນຊົ່ວຄາວ ແບບມີເງື່ອນໄຂຄື: ມອດໄຟ ແລ້ວເອົາຂອງກິນ. ແຕ່ການກະທຳຂອງມັນບໍ່ມີສະຕິ. ລີງ ຣາຟາແອນ ຕົວ ດຽວກັນນັ້ນ ໃນເມື່ອໄດ້ຮັບຈອກຮົ່ວແລ້ວກໍກະທຳເຊັ່ນເກົ່າເພື່ອຈະມອດໄຟຄື: ແລ່ນເອົ້າໄປຫາໄຟ ແລະ ຖອກຈອກເປົ່າໃສ່ແປວໄຟ. ສັດກະທຳບໍ່ແມ່ນເພື່ອ ຮັບຮູ້ ແຕ່ຫາກແມ່ນເພື່ອປັບຕົວໃຫ້ສອດຄ່ອງກັບສິ່ງແວດລ້ອມ. ຄວາມຫ້າວຫັນ - ຂອງສັດຕໍ່ສິ່ງແວດລ້ອມນັ້ນ ມີລັກສະນະເປັນຄວາມຕ້ອງການ.

ຮູບແບບສ່ອງແສງແບບສັງຄົມ ແມ່ນຮູບແບບສ່ອງແສງລະດັບສູງ, ມັນເປັນຮູບແບບທີ່ມີລັກສະນະສະເພາະສຳລັບຄົນ. ມັນເກີດມີຂຶ້ນພື້ນຖານຈິດ ຕະສາດຂອງສັດລະດັບສູງ ແລະ ກວມລວມເອົາຫລາຍສ່ວນປະກອບຂອງ ຈິດຕະສາດ (ເຊັ່ນ ການສະທ້ອນ, ສັນຊາດຍານ), ແຕ່ແມ່ນຮູບແບບການສ່ອງແສງແບບໃໝ່ທາງດ້ານຄຸນນະພາບ. ຮູບແບບສ່ອງແສງແບບສັງຄົມເກີດມີ ຂຶ້ນມາບໍ່ແມ່ນຕາມກົດເກນຊີວະສາດ ຫາກແມ່ນຕາມກົດເກນສັງຄົມ. ມັນຕິດພັນຢ່າງແໜ້ນແຟ້ນກັບການເຄື່ອນໄຫວຕົວຈິງຂອງຄົນໃນການດັດສ້າງຄວາມເປັນ ຈິງແບບພາວະວິໄສ. ຮູບແບບສັງຄົມເກີດມີຂຶ້ນມາຍ້ອນການສ້າງຕັ້ງສັງຄົມມະນຸດແລະກະໂຕຮູບແບບນີ້ເອງ ແມ່ນປັດໄຈຂອງການສ້າງຕັ້ງດັ່ງກ່າວ.

ປະຖົມປັດໄຈທາງຊີວະ ແລະ ປັດໄຈສັງຄົມຂອງການສ້າງຕັ້ງ ຈິດສຳນຶກນັ້ນຄືແນວໃດແດ່ ? ໃນຈຳນວນປະຖົມປັດໄຈທາງຊີວະສາດ ຂອງການ ຜັນປ່ຽນ ແຕ່ລີງມາເປັນຄົນນັ້ນ ມີການອ້ານຜ່ານໄປເຖິງການຍ່າງແບບຕັ້ງຕົວ - ແລະປົດປ່ອຍຕີນໜ້າສຳລັບຈູດປະສົງອື່ນ, ແຕ່ຫາກບໍ່ແມ່ນໃຊ້ເພື່ອຍ່າງ. ດັ່ງຮູ້ກັນແລ້ວວ່າ ສັດທີ່ເປັນຕົ້ນກຳເນີດຂອງຄົນນັ້ນດຳເນີນຊີວິດຢູ່ເທິງຕົ້ນໄມ້ເປັນຕົ້ນຕໍ. ຕາມເບິ່ງແລ້ວ ແມ່ນຍ້ອນການປ່ຽນແປງເງື່ອນໄຂທຳມະຊາດ ( ປ່າໄມ້ໄດ້ສູນຫາຍໄປ ) ພວກມັນຈຶ່ງອ້າມຜ່ານມາສູ່ແບບແຜນດຳລົງຊີວິດຢູ່ ເທິງໜ້າດິນ. ປັດໄຈທຳມະຊາດ ໄດ້ແກ່ການຮຽນຮູ້ໃຊ້ໄຟ ແລະ ການປ່ຽນແປງລັກສະນະຂອງອາຫານການກິນ, ການເກີດມີ, ການກ້າວຂຶ້ນນຳໃຊ້ ຢ່າງ

ເປັນລະບົບສິ່ງວັດຖຸຕ່າງໆ ມາເປັນເຄື່ອງມືຊຸດຄົ້ນພາຫະນະການດຳລົງ ຊີວິດແລະອື່ນໆ. ທຸກສິ່ງເຫລົ່ານີ້ ໄດ້ດັດສ້າງຮ່າງກາຍຂອງຄົນ ໂດຍສະເພາະແມ່ນມັນສະໝອງ. ແຕ່ການຂະຫຍາຍຕົວທາງຊີວະສາດ ພຽງແຕ່ໄດ້ສ້າງ ເງື່ອນໄຂໃຫ້ຈິດສຳນຶກເກີດມີຂຶ້ນມາ. ກະໂຕຈິດສຳນຶກເກີດມີຂຶ້ນມາພຽງແຕ່ ໃນສັງຄົມເທົ່ານັ້ນ, ໃນຈຳນວນປັດໄຈທາງສັງຄົມທີ່ພາໃຫ້ເກີດມີຈິດສຳນຶກນັ້ນ ແມ່ນການອອກແຮງງານ ພາສາຄວາມເວົ້າ ການພົວພັນ.

ດັ່ງ ຝ.ອັງແກນ ໄດ້ໃຫ້ຂໍ້ສັງເກດໃນບົດປະພັນ "ບົດບາດການອອກແຮງງານໃນຂະບວນວິວັດແຫ່ງການຜັນປ່ຽນຈາກລີງມາເປັນຄົນ" ນັ້ນວ່າແຮງງານ ແລະຄວາມປາກເວົ້າຢ່າງຈະແຈ້ງແມ່ນສອງປັດໄຈພື້ນຖານທີ່ພາໃຫ້ເກີດ ມີຄົນ ແລະ ຈິດສຳນຶກຂອງຄົນ. ຝ.ອັງແກນ ຂຽນວ່າ "ແຮງງານເປັນຜູ້ສ້າງຄົນ-ຂຶ້ນມາ" ໑). ແຮງງານແມ່ນຮູບແບບການເຄື່ອນໄຫວຮ່ວມກັນແບບ ຮວມໝູ່ຂອງຄົນໃນການດັດສ້າງໂລກພາຍນອກ ໂດຍນຳໃຊ້ເຄື່ອງມື.

ບົດບາດສະເພາະຂອງແຮງງານໃນຊີວິດສັງຄົມນັ້ນ ແມ່ນຍ້ອນຈຸດພິເສດ-ອັນແນ່ນອນຕ່າງໆຂອງມັນ. ໂດຍຕອບສະໜອງຄວາມຕ້ອງການຂອງຄົນ ຜະລິດຕະພັນຂອງແຮງງານສ້າງພື້ນຖານທາງວັດຖຸໃຫ້ແກ່ການຄົງຢູ່ຂອງສັງຄົມ . ແຮງງານມີລັກສະນະລວມໝູ່, ມັນສາມາດເປັນໄປໄດ້ພຽງແຕ່ໃນສັງຄົມເທົ່ານັ້ນ. ຈາກນັ້ນຈຶ່ງເກີດມີຄວາມຈຳເປັນໃນການພົວພັນເຊິ່ງກັນແລະກັນ ທີ່ໃນຜົນສຸດທ້າຍໄດ້ນຳໄປເຖິງການປະກົດຕົວຂອງພາສາ.

## ມ. ສາຍພົວພັນຊຶ່ງກັນແລະກັນລະຫວ່າງ ພາສາ ແລະ ຈິນຕະນາການ

ພາສາ ແລະ ຈິນຕະນາການຄົງຢູ່ໃນຄວາມເປັນເອກະພາບແບບ ສັດຈະວິພາກ. ຈິນຕະນາການ ແມ່ນສ່ວນປະກອບທີ່ສຳຄັນ ຂອງຈິດສຳນຶກ. ຄວາມເປັນເອກະພາບລະຫວ່າງພາສາແລະຈິນຕະນາການ ສະແດງອອກມາກ່ອນອື່ນ

---

໑. ກ.ມາກ ແລະ ຝ.ອັງແກນ ບົດນິພົນເຫລັ້ມ ໒໐, ໜ້າ ໔໘໖ .

ໝົດໃນດ້ານປະຫວັດສາດ ໝາຍຄວາມວ່າທ່າມກາງການກຳເນີດຂອງຈິດສຳນຶກ. ພາສາແລະຈິນຕະນາການເກີດມີຂຶ້ນມາພ້ອມກັນ. ກ.ມາກ ຂຽນວ່າພາສາກໍເປັນລັກສະນະປະຖົມບູຮານເຊັ່ນດຽວກັນກັບຈິດສຳນຶກ. ພາສາແມ່ນການສະແດງອອກເປັນວັດຖຸຂອງແນວຄິດ ແມ່ນຮູບແບບການຄົງຕົວຂອງມັນ.ທຳມະຊາດເປັນວັດຖຸຂອງພາສານັ້ນ ຢູ່ບ່ອນວ່າ ພາສາແມ່ນການສັ່ນສະເທືອນ ຂອງອາກາດ ໝາຍຄວາມວ່າແມ່ນສຽງທີ່ຄົນເຮົາສາມາດຮັບເອົາດ້ວຍຄວາມຮູ້ສຶກໄດ້.

ໃນປະຈຸບັນນີ້ ມີຫລາຍກວ່າ ໔,໕ ພັນພາສາຕ່າງໆ (ພາສາປະຈຳຊາດ ຊົນຊາດ, ຊົນເຜົ່າ ). ພາສາແມ່ນຮູບແບບສະແດງແນວຄິດແບບທົ່ວໄປ. ມີພາສາແບບທຳມະຊາດ ເຊິ່ງຄົນເຮົາເວົ້າລົມກັນ ແລະ ພາສາທຽມ ເຊິ່ງໃຊ້ໃນວິທະຍາສາດ ແລະ ເຕັດນິກ (ຫລັກຕຳລາ, ຮູບແຕ້ມ ແລະ ອື່ນໆ).

ການຄົ້ນຄວ້າວິທະຍາສາດ ສຸດທ້າຍໄດ້ພິສູດໃຫ້ເຫັນການພົວພັນອັນ ຂາດບໍ່ໄດ້ລະຫວ່າງ ຈິດສຳນຶກ ແລະ ພາສາ. ເຊັ່ນວ່າ ຕະຫລອດເວລາທັງໝົດທີ່ຄົນບໍ່ນອນນັ້ນ ຄົນເຮົາ "ປາກເວົ້າ"ຢູ່ ນັບທັງ "ປາກເວົ້າຢູ່ໃນໃຈ"). - ການທົດລອງໄດ້ພິສູດແລ້ວວ່າ ໃນເມື່ອຄົນຄິດໃນໃຈໂດຍບໍ່ອອກປາກອອກສຽງນັ້ນ ລີ້ນ, ສົບ, ເພດານປາກ, ສາຍສຽງ ແລະ ຄໍຫອຍຂອງຄົນລ້ວນແຕ່ ຢູ່ໃນການເໜັງຕີງ ລົມນຳສຳນຽງປາກເວົ້າໂດຍບໍ່ມີສຽງ. ເປັນທີ່ພິສູດ ແລ້ວວ່າ ທ່າມກາງຈິນຕະນາການ ມີກະແສເສັ້ນປະສາດສົ່ງສະທ້ອນໃສ່ອະໄວ ຍະວະປາກເວົ້າຢ່າງບໍ່ຂາດສາຍ.

ພາສາຂອງຄົນແຕກຕ່າງກັນກັບ "ພາສາ" ຂອງສັດຢ່າງສິ້ນເຊີງ. ສັດ-ສ່ວນຫລາຍມີອະໄວຍະວະສຽງ ແລະ ສາມາດສົ່ງສຽງຢ່າງແຕກຕ່າງກັນທີ່ສຸດ ເປັນທີ່ຮູ້ກັນວ່າ ທະນີຄຸ່ນສາມາດສົ່ງສຽງ ໝ໔ ຊະນິດ ແລະ ມີການບັນທຶກ - ສຽງ ປາໂດແຟງ ກາວ ໝ໐ ສຽງ. ແຕ່ສຽງຂອງສັດບໍ່ແມ່ນພາສາໃນຄວາມໝາຍແທ້ຈິງຂອງສັບນີ້. ບໍ່ມີສຽງໃດຂອງສັດ ຈະໝາຍເຖິງສິ່ງວັດຖຸໃດໜຶ່ງ ພວກສັດໃຊ້ສຽງເພື່ອສະແດງຄວາມຮູ້ສຶກຕ່າງໆ ເຊັ່ນ ການຫິວ, ຢາກກິນນ້ຳ ຄວາມຢ້ານກົວ, ຄວາມກັງວົນ ແລະ ອື່ນໆ.

ພາສາປະຕິບັດໜ້າທີ່ຕ່າງໆ. ແນວຄິດແລະຄວາມຮັບຮູ້ມີຊີວິດຊີວາ ຂຶ້ນພຽງແຕ່ໃນຄຳສັບ ແລະ ຜ່ານຄຳສັບ. ຄຳສັບບໍ່ພຽງແຕ່ໝາຍເຖິງສິ່ງ ວັດຖຸ

ເທົ່ານັ້ນ ແຕ່ຍັງສະແດງເຖິງແນວຄິດອີກດ້ວຍ. ຄຳສັບເໝືອນວ່າເປັນ ຕົວແທນໃຫ້ແກ່ສິ່ງວັດຖຸ, ຕາງໜ້າສິ່ງວັດຖຸໃນຈິດສຳນຶກ.

ພາສາມີຂີດບາດສັງລວມ. ວ.ອີ.ເລນິນ ເຄີຍເວົ້າເຖິງບັນຫາທີ່ວ່າ ແຕ່ລະສັບລ້ວນແຕ່ໄດ້ສັງລວມທັງນັ້ນ. ປະຫວັດສາດຂອງພາສາ ແມ່ນປະ ຫວັດສາດຂອງການຮັບຮູ້, ພາສາທຳມະຊາດແລະພາສາທຽມ ປະກອບເປັນຄວາມຈົງຈຳທາງສັງຄົມຂອງ ໂລກມະນຸດ . ພາສາແມ່ນພາຫະນະສະສົມຄວາມ ຮູ້ແລະສົ່ງຄວາມຮູ້ດັ່ງກ່າວໃຫ້ຮຸ່ນຄົນຕໍ່ໆໄປ. ພາສາແມ່ນພາຫະນະຕິດຕໍ່ ລະຫວ່າງຄົນທັງຫລາຍ, ລະຫວ່າງປະຊາຊົນ, ລະຫວ່າງລັດ, ລະຫວ່າງຄົນຮຸ່ນກ່ອນ ແລະ ຄົນຮຸ່ນໃໝ່. ຂີດບາດດັ່ງກ່າວຂອງພາສາເພີ່ມຂຶ້ນເປັນພິເສດ - ຫລັງຈາກການປະດິດສ້າງຕົວອັກສອນ.

ໃນຂະນະດຽວກັນນັ້ນ ພາສາ ແລະ ຈິນຕະນາການບໍ່ແມ່ນອັນດຽວກັນ . ເຖິງຈະມີຄວາມເປັນເອກະພາບກັນກໍ່ຕາມ ພາສາ ແລະ ຈິນຕະນາການແຕກຕ່າງກັນ. ຈິນຕະນາການ ແມ່ນການສ່ອງແສງຄວາມເປັນຈິງພາວະວິໄສ.ພາສາ ແມ່ນ ພາຫະນະສະແດງວິທີຄິດແທ້ນັ້ນ ແລະ ສິ່ງແນວຄິດ. ຈິນຕະ ນາການ ແມ່ນເນື້ອໃນ, ພາສາແມ່ນຮູບແບບ. ຈິນຕະນາການ ມີລັກສະນະ ມະໂນພາບ, ພາສາ ຊ້ຳພັດມີລັກສະນະວັດຖຸ. ຈິນຕະນາການບໍ່ສາມາດ ໃຫ້ຄົນຜູ່ອື່ນຮັບຮູ້ນຳໄດ້, ພາສາ ມີຄວາມສາມາດອັນນີ້. ຈິນຕະນາການມີລັກສະນະສາກົນ,ພາສາ ມີລັກສະນະຊາດ. ຈິນຕະນາການ ມີລັກສະນະປ່ຽນແປງຫຼາຍກ່ວາ,ພາສາ ມີລັກສະນະຮັກສາຮີດເດີມຫລາຍກວ່າ ລັກສະນະ ອອນໄຫວໜ້ອຍກວ່າ.

ທິດສະດີວັດຖຸນິຍົມສັດຈະວິພາກ ວ່າດ້ວຍຈິນຕະນາການ ແລະ ພາສານັ້ນ ກົງກັນຂ້າມກັບລັດທິຈິດຕະນິຍົມ. ປັດຊະຍາຈິດຕະນິຍົມ ອັດຕະວິໄສສະ ໄໝໃໝ່ ອີງໃສ່ເລື່ອງທີ່ວ່າ ຄຳສັບບໍ່ສະແດງເຖິງອັນໃດທີ່ເປັນຈິງ, ວ່າຄຳ ສັບເຊັ່ນ "ຄວາມເປັນທຳ", "ລັດທິທຶນນິຍົມ","ລັດທິສັງຄົມນິຍົມ", " ການຫວ່າງງານ" ນັ້ນບໍ່ສອດຄ່ອງກັບສິ່ງໃດໃນຕົວຈິງ. ທຸກໆການປະທະກັນ ທາງສັງຄົມນັ້ນຄື່ວ່າ ລ້ວນແຕ່ເກີດຈາກການໃຊ້ສັບ: ວິກິດການ, ການຫວ່າງງານ ການປະຕິວັດ ແລະ ອື່ນໆ. ຕາມທັດສະນະຂອງບັນດານັກຈິດຕະນິຍົມແລ້ວ - ຄວນດຳເນີນການປະຕິຮູບພາສາ ເຮັດໃຫ້ພາສາສົມບູນຂຶ້ນ ເພາະພາສາແມ່ນ

ຕົ້ນເຫດຂອງໄພທຸກໆປະການ. ທາດແທ້ລັກສະນະຊົນຊັ້ນຂອງທິດສະດີດັ່ງນີ້ - ແມ່ນປິດບັງ, ຕົລວດກວດພຽງ ການຂັດແຍ່ງທີ່ຮ້າຍແຮງທີ່ສຸດ ຂອງລັດທິທຶນນິຍົມ ແລະ ຫລອກລວງຊົນຊັ້ນກຳມະກອນ ໃຫ້ໜີຫ່າງຈາກການຕໍ່ສູ້ປະຕິວັດ - ເພື່ອສັງຄົມນິຍົມ.

## ໔. ລັກສະນະຕັ້ງໜ້າແບບປະດິດສ້າງ ຂອງ ຈິດສຳນຶກ

ລັດທິວັດຖຸນິຍົມສັດຈະວິພາກຄົ້ນຄວ້າວັດຖຸ ແລະ ຈິດສຳນຶກໃນຄວາມເປັນເອກະພາບ ແລະ ການກະທົບຊຶ່ງກັນແລະກັນ ແບບສັດຈະວິພາກຢ່າງ ແໜ້ນແຟ້ນ. ຈິດສຳນຶກ ມີມາທີຫລັງ. ແຕ່ມັນມີລັກສະນະເອກະລາດແບບທຽບຖານ ແລະ ສົ່ງຜົນສະທ້ອນຄືນໃສ່ການດຳລົງຄົງຕົວ. ວ.ອີ.ເລນິນ ໄດ້ຊີ້ແຈງວ່າ ຈິດສຳນຶກ ບໍ່ພຽງແຕ່ສ່ອງແສງໂລກຮອບຕົວເທົ່ານັ້ນ ແຕ່ຍັງປະດິດສ້າງມັນອີກ ລັດທິວັດຖຸນິຍົມສັດຈະວິພາກ ຄົ້ນຄວ້າຈິດສຳນຶກຄື ກຳລັງແຮງທີ່ມີລັກສະນະປະດິດສ້າງ. ການເຄື່ອນໄຫວຂອງຄົນໃນສັງຄົມ ມີລັກສະນະມີເປົ້າໝາຍ ຢ່າງຈະແຈ້ງ ແລະ ມີລັກສະນະມຸ່ງໄປໜ້າ. ຄົນບໍ່ພຽງແຕ່ປັບຕົວເຂົ້າກັບ ທຳມະຊາດເໝືອນດັ່ງສັດທົ່ວໄປເທົ່ານັ້ນ ແຕ່ຍັງປ່ຽນແປງທຳມະຊາດໃຫ້ສອດ ຄ່ອງກັບຈຸດປະສົງຂອງຕົນ. ລັກສະນະຕັ້ງໜ້າຂອງຈິດສຳນຶກຢູ່ບ່ອນວ່າ ມັນບໍ່ແມ່ນພຽງແຕ່ການສ່ອງແສງໂລກພາວະວິໄສແບບງ່າຍດາຍເທົ່ານັ້ນ ແຕ່ມັນສ້າງຕັ້ງຂຶ້ນມາ ໃນພາກປະຕິບັດຕົວຈິງ ແລະ ແມ່ນຮັບໃຊ້ເພື່ອຈຸດປະສົງຂອງພາກປະຕິບັດຕົວຈິງ. ຈິດສຳນຶກຂອງຄົນ ບໍ່ພຽງແຕ່ສ່ອງແສງເຖິງສິ່ງແວດລ້ອມທຳມະຊາດເທົ່ານັ້ນ ແຕ່ກ່ອນອື່ນໝົດ ມັນສ່ອງແສງເຖິງຊີວິດສັງຄົມ ເຖິງການ ດຳລົງຄົງຕົວຂອງຄົນຢູ່ໃນສັງຄົມ.

ໃນຂະບວນວິວັດການເຄື່ອນໄຫວຕົວຈິງຂອງຄົນ ບໍ່ພຽງແຕ່ມີການ ສ່ອງແສງການເຄື່ອນໄຫວດັ່ງກ່າວໃນສະໝອງຂອງຄົນເທົ່ານັ້ນ ແຕ່ຍັງໄດ້ດຳເນີນການຫັນປ່ຽນ ຈາກສິ່ງທີ່ມີລັກສະນະຈິດໃຈ ໃຫ້ກາຍເປັນສິ່ງທີ່ມີລັກສະນະວັດຖຸ ເມື່ອເກີດມີຂຶ້ນມາໃນສະໝອງຂອງຄົນຄືດັ່ງຈຸດປະສົງຂອງການຂະຫຍາຍ ຕົວ

ທາງສັງຄົມແລ້ວ ແນວຄິດທີ່ສ່ອງແສງ ການກະທຳຂອງຄົນນັ້ນ ຫັນປ່ຽນ ມາເປັນກຳລັງແຮງດ້ານວັດຖຸ. ແນວຄິດກາຍເປັນກຳລັງແຮງດ້ານວັດຖຸ ໃນເມື່ອມະຫາຊົນໄດ້ຮຽນຮູ້ມັນ.

ລັກສະນະຕັ້ງໜ້າຂອງຈິດສຳນຶກ ສະແດງອອກໃນການຄາດຄະເນ ເຊິ່ງໄດ້ກຳນົດໃນຄວາມໝາຍອັນກວ້າງຂວາງ ຄືດັ່ງການສ່ອງແສງເຖິງອະນາຄົດ ໃນການສ່ອງແສງຄວາມເປັນຈິງຂອງຕົນ ຄົນບໍ່ຈຳກັດພຽງແຕ່ສິ່ງທີ່ມີໃນ ປະຈຸບັນນີ້ເທົ່ານັ້ນ ແຕ່ຍັງຢາກແນມເຫັນອະນາຄົດອີກພ້ອມ. ປະຫວັດສາດຂອງສັງຄົມຢັ້ງຢືນໃຫ້ເຫັນວ່າ ຄວາມສາມາດຂອງຄົນ ໃນການຄາດຄະເນນັ້ນ ເກີດມີຂຶ້ນມາແຕ່ສະໄໝປະຖົມບູຮານພຸ້ນ ແລະ ເກີດມີມາຍ້ອນຄວາມຕ້ອງການ ໃນພຶດຕິກຳຕົວຈິງ. ໃນເບື້ອງຕົ້ນ ການຄາດຄະເນໄດ້ກໍ່ຕັ້ງຂຶ້ນມາ ບົນພື້ນ ຖານການລື້ມຄືນ ຂະບວນວິວັດນີ້ ຫຼື ຂະບວນວິວັດນັ້ນໃນທຳມະຊາດ, ເຊັ່ນ ຕົວຢ່າງ ກໍ່ຄືການພັນປ່ຽນລະດູການໃນແຕ່ລະປີ. ເນື່ອງຈາກວ່າ ການພັນ ປ່ຽນລະດູການ ຄື: ລະດູໜາວ, ລະດູບານໃໝ່, ລະດູຮ້ອນ, ລະດູໃບໄມ້ຫຼົ່ນ ແລະ ຕໍ່ໄປ ວຽນໄປວຽນມາຢ່າງເປັນປະຈຳ ແລະ ບໍ່ມີວັນສິ້ນສຸດນັ້ນ ຄົນກໍ່ໄດ້ສະຫຼຸບຢ່າງເໝາະສົມ ໂດຍຮູ້ວ່າ ແມ່ນລະດູການໃດຈະມາເຖິງ ຫຼັງຈາກລະດູການນັ້ນ ຫຼື ລະດູການນີ້.

ພາວະກະໂດດໃນຄວາມສາມາດ ຄາດຄະເນນັ້ນ ຕິດພັນກັບການຮັບຮູ້ຂອງຄົນຕໍ່ກົດເກນຂອງໂລກວັດຖຸ ແລະ ມີການຄາດຄະເນຢ່າງມີວິທະຍາສາດເຊິ່ງໃນປະຈຸບັນນີ້ ໄດ້ຮັບການຂະຫຍາຍຕົວນັບມື້ກວ້າງ ແລະ ມີຄວາມໝາຍ ຕົວຈິງ.

ມີຄຳຖາມວ່າ ຕ້ອງການ ການຄາດຄະເນມາເພື່ອຫຍັງ. ຕ້ອງຊອກຫາຄຳຕອບ ໃນກະໂຕພາກປະຕິບັດຕົວຈິງ ເຊິ່ງຖ້າປາສະຈາກມັນແລ້ວ ຈະສູນເສຍລັກສະນະສົມເຫດສົມຜົນ. ກ່ອນອື່ນໝົດ ຕ້ອງການ ການຄຳນວນຜົນທີ່ຈະໄດ້ຮັບ ພາຍຫຼັງໄດ້ບັນລຸຈຸດປະສົງນີ້ ຫຼື ຈຸດປະສົງນັ້ນແລ້ວ ເຊິ່ງເປັນຜົນ ໃນອະນາຄົດສະເພາະໜ້າ ຫຼື ໃນອະນາຄົດຍາວນານ ໂດຍສະເພາະ. ການພົວພັນກັບທຳມະຊາດ ໃນເງື່ອນໄຂສັງຄົມທຶນນິຍົມ ທີ່ສົນໃຈພຽງແຕ່ຜົນດີ ສະເພາະໜ້າ ຫາກບໍ່ຄຳນຶງ ຜົນສະ ທ້ອນຍາວນານນັ້ນ ຜົນສຸດທ້າຍໄດ້ນຳໄປ – ເຖິງວິກິດການທາງ ນິເວດວິທະຍາ. ຜົນຢ້ອນຫຼັງດັ່ງກ່າວດັບສູນຜົນດີ ແລະ

24/VII ຫ້າມຈຳໜ່າຍ

ກາຍເປັນສິ່ງທີ່ຕ້ານກັບສັງຄົມນັ້ນເອງ. ໃນການຕັດສິນບັນຫາ ຈຳເປັນຕ້ອງ-ນຳໃຊ້ຜົນຂອງການຄາດຄະເນ, ຕ້ອງກະຕວງຜົນທີ່ຈະໄດ້ຮັບໃນໄລຍະ ຍາວນານ ຈາກການເຄື່ອນໄຫວຂອງຄົນ. ວ.ອິ.ເລນິນ ໃຫ້ຂໍ້ສັງເກດການວ່າໃນເງື່ອນໄຂກໍ່ສ້າງ ແລະ ຂະຫຍາຍສັງຄົມນິຍົມ ສິ່ງທີ່ສຳຄັນນັ້ນແມ່ນຕ້ອງ ແນມເຫັນແລວທາງອະນາຄົດທີ່ມີຄວາມໝາຍປະຫວັດສາດ. ໃນຊຸມປີທຳອິດ ແຫ່ງການກໍ່ສ້າງສັງຄົມນິຍົມຢູ່ ສ.ສ.ສ.ຊ. ທ່ານໄດ້ໃຫ້ຂໍ້ສັງເກດການວ່າໃນເມື່ອເລີ່ມຕົ້ນແຕ່ການດັດສ້າງທາງດ້ານສັງຄົມຜູ້ນມາ ຕ້ອງແນມເຫັນຈຸດໝາຍ ສຸດທ້າຍ ເຊິ່ງການດັດສ້າງດັ່ງກ່າວນີ້ ດຳເນີນໄປເພື່ອບັນລຸເຖິງ ນັ້ນຄືກໍ່ສ້າງສັງຄົມນິຍົມ.

ລັກສະນະປະດິດສ້າງຂອງຈິດສຳນຶກ ສະແດງອອກດ້ວຍກຳລັງແຮງ ຢ່າງເປັນພິເສດ ໃນເມື່ອມະຫາຊົນປະຕິວັດໄດ້ຮັບການປຸກລະດົມດ້ວຍແນວຄິດກ້າວໜ້າ ເພື່ອດຳເນີນການຕໍ່ສູ້. ຊາວຜູ້ອອກແຮງງານປະເທດໂຊວຽດ ໄດ້ສະແດງໃຫ້ເຫັນບົດບາດດັ່ງກ່າວຂອງຈິດສຳນຶກ. ພາຍໃຕ້ການນຳພາຂອງພັກກອມມູນິດ ພວກເຂົາເຈົ້າໄດ້ໂຄ່ນລົ້ມອຳນາດຂອງພວກນາຍທຶນແລະ ເຈົ້າທີ່ດິນ - ແລະ ໄດ້ສຳເລັດການກໍ່ສ້າງສັງຄົມນິຍົມ ແລະ ໃນປະຈຸບັນນີ້ ພວມກໍ່ສ້າງ - ກອມມູນິດນິຍົມ. ໃນປະຈຸບັນນີ້ຊາວຜູ້ອອກແຮງງານລາວ ພວມກໍ່ສ້າງພື້ນຖານລະບອບສັງຄົມນິຍົມດ້ວຍຄວາມເຊື່ອໝັ້ນ.

ຈິດສຳນຶກຂອງບັນດານັກກໍ່ສ້າງສັງຄົມນິຍົມ ປ່ຽນແປງໃນກະໂຕ ການດັດສ້າງສັງຄົມນັ້ນເອງ. ແຕ່ທິດສະດີລັດທິມາກ ແລະ ບົດຮຽນຕົວຈິງຂອງ ສ.ສ ສ.ຊ. ແລະ ບັນດາປະເທດສັງຄົມນິຍົມອື່ນໆນັ້ນຢັ້ງຢືນໃຫ້ເຫັນວ່າ ການດັດສ້າງຈິດສຳນຶກຂອງຄົນບໍ່ໄດ້ສິ້ນສຸດລົງ ພ້ອມກັນກັບການດັບສູນຊົນຊັ້ນກົດຂີ່ຂູດ-ຮີດ ມັນສືບຕໍ່ໃນທຸກໆຂັ້ນຂອງການກໍ່ສ້າງກອມມູນິດນິຍົມ. ດ້ວຍເຫດນັ້ນ ການອົບຮົມ ໂລກະທັດກອມມູນິດນິຍົມ ວິທະຍາສາດ ໃຫ້ແກ່ຊາວຜູ້ອອກແຮງ ງານໃນສັງຄົມ ສັງຄົມນິຍົມທຸກຄົນນັ້ນ ຈຶ່ງເປັນໜ້າທີ່ຮີບດ່ວນ.

# ພາກທີ ສີ່

## ການຂະຫຍາຍຕົວຂອງໂລກ. ສັດຈະວິພາກຄືທິດສະດີ ວ່າດ້ວຍການຂະຫຍາຍຕົວແລະສາຍພົວພັນລວມທົ່ວໄປ

### ໑. ລັກສະນະພິເສດທົ່ວໄປ ຂອງສັດຈະວິພາກວັດຖຸນິຍົມ

ພາກນີ້ເລີ່ມຕົ້ນສະເໜີສັດຈະວິພາກວັດຖຸນິຍົມ. ທິດສະດີປັດຊະຍານີ້ ບໍ່ແມ່ນພາກສ່ວນເອກະລາດ ແຕ່ປະກອບເປັນດ້ານໜຶ່ງ ທີ່ຂາດບໍ່ໄດ້ຂອງ ລັດທິວັດຖຸນິຍົມສັດຈະວິພາກ ເຊິ່ງໃນນັ້ນລັດທິວັດຖຸນິຍົມ ແລະ ສັດຈະວິພາກ ນອນຢູ່ໃນຄວາມເປັນເອກະພາບຢ່າງຕັດຂາດຈາກກັນບໍ່ໄດ້. ແຕ່ເພື່ອການຄົ້ນຄວ້າສັດຈະວິພາກ ອາດຈະແຍກອອກແບບມີເງື່ອນໄຂ ແລະ ວິເຄາະໄຈ້ແຍກຕ່າງຫາກ.

ຖ້າຫາກປັດຊະຍາວັດຖຸນິຍົມອະທິບາຍທຳມະຊາດຂອງໂລກ, ອະທິ ບາຍວ່າຈິດສຳນຶກຂຶ້ນກັບວັດຖຸ ແລະ ອະທິບາຍທາດແທ້ຂອງຈິດສຳນຶກແລ້ວ ແມ່ນວ່າສັດຈະວິພາກຄົ້ນຄວ້າການຂະຫຍາຍຕົວຂອງໂລກຮອບຕົວຄົນ ກໍ່ຕັ້ງກົດເກນຂອງການຂະຫຍາຍຕົວດັ່ງກ່າວ. ມັນຄົ້ນຄວ້າທັງການຂະຫຍາຍຕົວຂອງ ການຮັບຮູ້ ເພາະວ່າການຮັບຮູ້ນັ້ນສ່ອງແສງການປ່ຽນແປງຂອງຄວາມເປັນຈິງ ຄືທຳມະຊາດ ແລະ ສັງຄົມແລ້ວ ກະໂຕມັນເອງ ກໍ່ປ່ຽນແປງ, ຂະຫຍາຍຕົວ.ດັ່ງນັ້ນສັດຈະວິພາກວັດຖຸນິຍົມ ແມ່ນທິດສະດີລວມ ວ່າດ້ວຍການຂະຫຍາຍຕົວການດຳລົງຄົງຕົວ ແລະ ການຮັບຮູ້, ແມ່ນທິດສະດີວ່າດ້ວຍການຂະຫຍາຍຕົວຂອງທຸກສິ່ງທີ່ຄົງຢູ່. ວ.ອີ.ເລນິນ ໄດ້ນິຍາມສັດຈະວິພາກຄືທິດສະດີວ່າດ້ວຍການຂະຫຍາຍຕົວທີ່ສົມບູນ, ຮອບດ້ານ ແລະ ເລິກເຊິ່ງທີ່ສຸດ. ທ່ານຕີລາຄາສູງ ຕໍ່ຄວາມໝາຍຂອງສັດຈະວິພາກ, ຮຽກມັນເປັນ"ຈິດໃຈ" ຂອງລັດທິມາກເພາະມັນແມ່ນຕົ້ນກຳເນີດໃຫ້ແກ່ລັກສະນະປະດິດສ້າງ ແລະປະຕິວັດຂອງລັດທິມາກ.

ຂໍ້ວິນິດໄສທາງທິດສະດີຂອງສັດຈະວິພາກວັດຖຸນິຍົມ ນຳໃຊ້ເຂົ້າ ໃນຂະ

ຂອບວິວັດການຮັບຮູ້ ແລະ ການເຄື່ອນໄຫວຕົວຈິງ. ດັ່ງນັ້ນເອງທີ່ສັດຈະວິພາກວັດຖຸນິຍົມບໍ່ພຽງແຕ່ແມ່ນທິດສະດີຂະຫຍາຍຕົວເທົ່ານັ້ນ ແຕ່ຍັງແມ່ນແບບ ວິທີລວມທົ່ວໄປຂອງການຮັບຮູ້ ແລະ ການປ່ຽນແປງຄວາມເປັນຈິງ. ດ້ວຍເຫດ-ນັ້ນສັດຈະວິພາກຈຶ່ງມີວິທະຍາສາດຢ່າງເລິກເຊິງ ແລະ ຕິດພັນຢ່າງ ແຫນ້ນແຟ້ນ ກັບຊີວິດ ກັບພາກຕົວຈິງຂອງການຕໍ່ສູ້ປະຕິວັດ, ຂອງການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ. ຄວາມຫມາຍອັນໃຫຍ່ຫລວງຂອງມັນຢູ່ບ່ອນນີ້ - ເອງ. ພ້ອມໆກັນກັບສັດຈະວິພາກ ລັດທິວັດຖຸນິຍົມປັດຊະຍາກາຍເປັນທິດສະດີທີ່ຕໍ່ເນື່ອງຢ່າງເປັນລຳດັບ ແລະ ມີວິທະຍາສາດຢ່າງແທ້ຈິງ. ສັດຈະວິພາກ-ຈະກາຍເປັນສິ່ງທີ່ມີຄຸນປະໂຫຍດເຕັມສ່ວນ ກໍ່ຕໍ່ເມື່ອວ່າມັນແມ່ນແບບວັດຖຸນິຍົມ.

ສັດຈະວິພາກວັດຖຸນິຍົມແຕກຕ່າງຢ່າງສິ້ນເຊີງ ກັບວິທີການຮັບຮູ້ປັດຊະຍາອື່ນໆ ເຊັ່ນອະພິທຳ ແລະ ສັດຈະວິພາກຈິດຕະນິຍົມ. ອະພິທຳບໍ່ຮັບຮູ້ ການຂະຫຍາຍຕົວຂອງຄວາມເປັນຈິງຫລືເຂົ້າໃຈມັນຢ່າງບໍ່ຖືກຕ້ອງ ບໍ່ໃຫ້ຄວາມສຳຄັນສາຍພົວພັນ ແລະ ການຂັດແຍ່ງພໍເທົ່າໃດ. ສັດຈະວິພາກຈິດຕະນິຍົມ ມີຄວາມຂາດຕົກບົກພ່ອງໃນພື້ນຖານ ເນື່ອງຈາກວ່າ ໃນການຂະຫຍາຍຕົວນັ້ນບໍ່ຄົ້ນຄວ້າວັດຖຸຫາກຄົ້ນຄວ້າຈິດໃຈຫລືແນວຄິດທີ່ເດັດຖານໃດຫນຶ່ງ. ໂດຍ ສອດຄ່ອງກັບທິດສະດີນີ້ແລ້ວ ໂລກວັດຖຸແມ່ນພຽງແຕ່ຮູບການດຳລົງຄົງຕົວຕ່າງຫາກ, ແມ່ນການຄົງຢູ່ອີກແບບຫນຶ່ງຂອງລະດັບອັນແນ່ນອນຂອງການຂະຫຍາຍຕົວ ຈິດໃຈເດັດຖານ.

ເນື້ອໃນພື້ນຖານຂອງສັດຈະວິພາກວັດຖຸນິຍົມ ສະແດງອອກໃນຫລັກການ, ກົດເກນ, ມາດຕະເກນ ແລະ ໃນບາງຂໍ້ກຳນົດ.

## ໔. ການເຄື່ອນເຫນັງແລະການຂະຫຍາຍຕົວຂອງໂລກວັດຖຸ

ຄວນຈຳແນກການເຄື່ອນເຫນັງ ແລະການຂະຫຍາຍຕົວ. ຕາມທຳມະດາແລ້ວ ໃນຊີວິດປະຈຳວັນ ຖືກັນວ່າການເຄື່ອນເຫນັງເປັນການເຄື່ອນຍ້າຍແບບງ່າຍດາຍຂອງສິ່ງວັດຖຸ. ນັກວັດຖຸນິຍົມໃນສະໄຫມກ່ອນກໍເຂົ້າໃຈທຳນອງ ນີ້ເຊັ່ນດຽວກັນ. ວັດຖຸນິຍົມສັດຈະວິພາກ ສຶກສາຄົ້ນຄວ້າການເຄື່ອນເຫນັງເລິກ

ເຊິ່ງກວ່ານີ້, ແລະ ຖືວ່າການເຄື່ອນເໜັງແມ່ນການປ່ຽນແປງເວົ້າລວມ, ຄື ການປ່ຽນແປງທຸກໆປະການ. ສິ່ງຂອງ ແລະ ປະກົດການບໍ່ພຽງແຕ່ປ່ຽນແປງທີ່ຕັ້ງຂອງຕົນ ບໍ່ພຽງແຕ່ປ່ຽນແປງທາງດ້ານປະລິມານເທົ່ານັ້ນ ແຕ່ຍັງມີ ການປ່ຽນແປງດ້ານຄຸນນະພາບຢູ່ພາຍໃນຂອງມັນ, ມັນກາຍເປັນແນວອື່ນ ໝາຍຄວາມວ່າໄດ້ຮັບການຂະຫຍາຍຕົວ. ໝາຍຄວາມວ່າການຂະຫຍາຍຕົວກໍແມ່ນການເຄື່ອນເໜັງ, ແມ່ນຮູບການສະເພາະຂອງມັນ. ການຂະຫຍາຍຕົວ ມີລັກສະນະພິເສດໃດແດ່ ?

ການຂະຫຍາຍຕົວ ມີລັກສະນະພາວະວິໄສ ແລະ ກວມລວມທົ່ວໄປ. ສິ່ງຂອງ ແລະ ປະກົດການທຸກຢ່າງຄື ພືດພັນ, ສັດ, ຄົນ ແລະ ສັງຄົມມະນຸດ-ຂະຫຍາຍຕົວ ແລະ ສະພາບການທີ່ພວກເຮົາຮັບຮູ້ໃນປະຈຸບັນຂອງສິ່ງເຫຼົ່ານີ້ແມ່ນໝາກຜົນຂອງການຂະຫຍາຍຕົວ. ຖ້າບໍ່ຮັບຮູ້ການຂະຫຍາຍຕົວແລ້ວ ກໍບໍ່ສາມາດຈະອະທິບາຍການຄົງຕົວຂອງປະກົດການທີ່ມີຫລາຍຮູບຫລາຍສີ. ໂດຍຮັບຮູ້ການຂະຫຍາຍຕົວ ພວກເຮົາໄດ້ຮັບຄວາມອະທິບາຍ ອັນເປັນຄວາມອະທິບາຍອັນດຽວທີ່ສາມາດເປັນໄປໄດ້ ແລະ ສອດຄ່ອງກັບຫລັກຖານວິທະຍາສາດ ຄືທຸກສິ່ງທີ່ຄົງຕົວນັ້ນ ເກີດມາໂດຍຜ່ານເສັ້ນທາງແຫ່ງການຂະຫຍາຍຕົວ. ເຊັ່ນ ສັງຄົມມະນຸດ ບໍ່ແມ່ນເວລາໃດກໍເປັນຄືກັນກັບແນວທີ່ເຮົາຮູ້ຈັກໃນປະຈຸບັນນີ້ . ເລີ່ມແຕ່ເວລາເກີດຂຶ້ນມາ ມັນໄດ້ຜ່ານໄລຍະຂະຫຍາຍຕົວທີ່ແຕກຕ່າງກັນດ້ານຄຸນນະພາບ ແລະ ດຽວນີ້ໃນຂອບເຂດທົ່ວໂລກພວມດຳເນີນການຂ້າມຜ່ານແຕ່ທຶນນິຍົມໄປສູ່ສັງຄົມນິຍົມ.

ບັນດາກົດເກນສັດຈະວິພາກ ເຊິ່ງເປັນກົດເກນແຫ່ງການຂະຫຍາຍຕົວນັ້ນ ໄດ້ຕອບບັນຫາຄົບຖ້ວນພໍສົມຄວນວ່າ ການຂະຫຍາຍຕົວແມ່ນຫຍັງ ແລະ ມັນ-ດຳເນີນໄປແນວໃດ. ແຕ່ບັນຫານີ້ຈະໄດ້ເວົ້າຂຶ້ນໃນພາກຕໍ່ໄປ. ແຕ່ດຽວນີ້ ກໍຄວນເນັ້ນໜັກວ່າ ການຂະຫຍາຍຕົວ ແມ່ນການປ່ຽນແປງປະເພດພິເສດ , ເຊິ່ງຕ້ອງກວມລວມທັງການປ່ຽນແປງດ້ານຄຸນນະພາບຂອງສິ່ງຂອງ, ການ - ປ່ຽນແປງໂຄງປະກອບຂອງສິ່ງຂອງດັ່ງກ່າວ, ການສູນຫາຍຂອງວັດຖຸຈຳນວນໜຶ່ງ ແລະ ການປະກົດມີຂຶ້ນມາຂອງວັດຖຸໃໝ່ອີກຈຳນວນໜຶ່ງ. ມັນບໍ່ ກັບຕ່າວຄືນຫລັງ, ມີທິດທາງ ແນ່ນອນ ແລະ ບໍ່ສາມາດຊ້ຳຮອຍສະພາບການໃນອະດີດໄດ້ຢ່າງຕົ້ນສ່ວນ. ກົກເຫງົ້າການຂະຫຍາຍຕົວຂອງວັດຖຸ ແລະ ການ

ປະກອບວັດຖຸບາງອັນນັ້ນ ແມ່ນການອັດແຍ່ງພາຍໃນ. ສາຍເຫດທີ່ພາໃຫ້ວັດຖຸຂະຫຍາຍຕົວນັ້ນ ນອນ ຢູ່ໃນກະໂຕມັນເອງ ແລະ ດ້ວຍເຫດນັ້ນ ການ ຂະຫຍາຍຕົວຈິງສະແດງຕົວອອກຄືການຂະຫຍາຍຕົວດ້ວຍຕົນເອງ ດຳເນີນ ໄປຍ້ອນມີສາຍເຫດພາຍໃນ ແຕ່ຫາກບໍ່ແມ່ນຍ້ອນກຳລັງພາຍນອກໃດໜຶ່ງ.

ນັກອະພິທຳສະໄໝໃໝ່ບໍ່ປະຕິເສດການຂະຫຍາຍຕົວໂດຍກົງ ແຕ່ຖື ມັນ ເປັນການປ່ຽນແປງດ້ານປະລິມານ, ແມ່ນການເພີ່ມຫລືຫລຸດຈຳນວນແບບງ່າຍດາຍ, ໂດຍບໍ່ມີການປ່ຽນແປງທາງດ້ານຄຸນນະພາບ. ພວກເຂົາແກ້ໄຂບັນຫາກ່ຽວກັບກົກເຫງົ້າຂອງການຂະຫຍາຍຕົວຢ່າງຜີວເຜີນເຊັ່ນດຽວກັນ. ພວກ - ເຂົາຖືວ່າ ສາຍເຫດທີ່ພາໃຫ້ເກີດມີການປ່ຽນແປງຂອງທຸກສິ່ງວັດຖຸນັ້ນ ແມ່ນການກະທົບຈາກພາຍນອກ. ສະເພາະວັດຖຸທັງໝົດແລ້ວ ກຳລັງແຮງ ພາຍນອກອາດຈະແມ່ນແຕ່ກຳລັງມະຫັດສະຈັນໃດໜຶ່ງ ໝາຍຄວາມວ່າ ພະເຈົ້າ- ເທົ່ານັ້ນ. ດັ່ງນັ້ນເອງອະພິທຳ ຈຶ່ງນຳໄປເຖິງລັດທິຈິດຕະນິຍົມ.

ດ້ວຍວິທີການນີ້ ມີສອງຄວາມເຂົ້າໃຈ ສອງທິດສະດີວ່າດ້ວຍການ ຂະຫຍາຍຕົວຄື: ທິດສະດີສັດຈະວິພາກ ແລະ ອະພິທຳ. ວ.ອິ.ເລນິນ ໄດ້ຂຽນກ່ຽວກັບບັນຫາດັ່ງກ່າວໃນ "ສະໝຸດປັດຊະຍາ" ໃນບົດ "ວ່າດ້ວຍບັນຫາ - ກ່ຽວກັບສັດຈະວິພາກ". ທ່ານຊີ້ແຈງວ່າ ທິດສະດີສັດຈະວິພາກມີວິທະຍາສາດ ແລະ ມີຄຸນປະໂຫຍດ, ສ່ວນທິດສະດີອະພິທຳ ບໍ່ມີຄຸນປະໂຫຍດ ແລະ ບໍ່ມີ ຊີວິດຊີວາ.

ດັ່ງນີ້ ການຂະຫຍາຍຕົວ ແມ່ນລັກສະນະສະເພາະອັນພື້ນຖານ ແລະ ຕັດຂາດບໍ່ໄດ້ຂອງຄວາມເປັນຈິງ. ໃນ ວິທະຍາສາດ ໃນສັດຈະວິພາກ ມັນ ສະແດງຕົວອອກໃນຫລັກການແຫ່ງການຂະຫຍາຍຕົວ *, ມັນແມ່ນໃຈກາງຂອງຈຸດເລີ່ມຕົ້ນຂອງສັດຈະວິພາກ ເຊິ່ງອ້ອມຂ້າງນັ້ນ ໄດ້ທ້ອນໂຮມທຸກໆກົດເກນແລະມາດຕະເກນ, ສະແດງ ລັກສະນະພິເສດຕ່າງໆຂອງການຂະຫຍາຍຕົວ ໂດຍຊີ້ແຈງໃຫ້ເຫັນວ່າ ມັນດຳເນີນໄປຢ່າງໃດ.

---

* ຫລັກການແມ່ນຈຸດເລີ່ມພື້ນຖານຂອງວິທະຍາສາດ.

## ມ. ການພົວພັນລວມທົ່ວໄປ ລະຫວ່າງປະກົດການ ຂອງຄວາມເປັນຈິງ

ການຂະຫຍາຍຕົວດຳເນີນໄປໂດຍຜ່ານການພົວພັນຊຶ່ງກັນ ແລະ ກັນ ລະຫວ່າງປະກົດການ. ຍ້ອນມີການພົວພັນດັ່ງນີ້ ປະກົດການກະທົບຊຶ່ງກັນແລະກັນ ແລະພ້ອມກັນປ່ຽນແປງ.

ການພົວພັນເຊິ່ງກັນລະຫວ່າງສິ່ງຂອງ ແລະ ປະກົດການນັ້ນມີລັກສະນະ-ພາວະວິໄສ ແລະ ລັກສະນະລວມທົ່ວໄປ. ອັນນີ້ຫມາຍຄວາມວ່າ ແຕ່ລະປະ-ກົດການຕ້ອງກ່ຽວພັນກັບປະກົດການອື່ນໆ. ເຊັ່ນຕົວຢ່າງ ພືດພັນທຸກຊະນິດ - ລ້ວນແຕ່ພົວພັນກັບດິນ ແລະ ອາກາດ ຖ້າຫາກຂາດດິນ ແລະ ອາກາດ ໄປແລ້ວ ມັນກໍບໍ່ສາມາດຄົງຢູ່ໄດ້ ມັນຍັງພົວພັນກັບພືດພັນຕ່າງໆ ແລະກັບສັດ ຍັງມີການພົວພັນກັບຕາເວັນ ເຊິ່ງພືດພັນຮັບເອົາຄວາມອົບອຸ່ນນຳ. ບໍ່ອາດຈະ - ເຂົ້າໃຈຊີວິດຂອງພືດພັນຢ່າງຖືກຕ້ອງໄດ້ ຖ້າປາສະຈາກການອະທິບາຍຄວາມຫມາຍຂອງພະລັງງານແສງຕາເວັນສຳລັບມັນ. ພາຍໃຕ້ການກະທົບຂອງ ພະລັງງານແສງຕາເວັນ ໃບໄມ້ຮັບເອົາທາດອາຍອາຊິດກາກບອນນິກ ຈາກອາກາດແລ້ວ ແຍກທາດອອກເປັນທາດກາກບອນ ເຊິ່ງພືດພັນຮັບເອົາເພື່ອ ຫລໍ່ລ້ຽງຕົນເອງ ແລະ ສົ່ງອອກເປັນອົກຊີແຊນ ສູ່ອາກາດຄືນ. ອົກຊີແຊນ ມີຄວາມຈຳເປັນສຳລັບການຫາຍໃຈຂອງສັດ ແລະ ຄົນ. ທາດປະສົມອົງຄະ - ທາດ (ທາດປະສົມປະເພດກາກບອນ) ທີ່ປະກອບເປັນຢູ່ໃນພືດພັນນັ້ນກໍ່ຖືກນຳໃຊ້ມາເປັນອາຫານສຳລັບສັດ ສ່ວນຄົນນຳໃຊ້ເປັນອາຫານ, ໃຊ້ດັງໄຟ ແລະ ເພື່ອ ຈຸດປະສົງອື່ນໆ. ເວົ້າລວມແລ້ວຊີວິດໃນຫນ່ວຍໂລກ ລວມທັງຊີວິດຂອງຄົນນັ້ນ ລ້ວນແຕ່ພົວພັນກັນກັບຕາເວັນ. ສາຍພົວພັນນີ້ມີລັກສະນະຫລາຍ ຮູບຫລາຍສີ, ຫລາຍຄວາມຫມາຍ ແລະ ເນື້ອໃນ. ບັນດາຮູບການທີ່ສຳຄັນກວ່າຫມູ່ຂອງສາຍພົວພັນນັ້ນ ສະແດງອອກຜ່ານກົດເກນແລະ ມາດຕະເກນ.

ຈາກສິ່ງທີ່ໄດ້ກ່າວມາຂ້າງເທິງນີ້ ສາມາດສະຫລຸບໄດ້ວ່າ: ສາຍພົວພັນ, ການກະທົບເຊິ່ງກັນແລະກັນ ໂດຍທົ່ວໄປນັ້ນແມ່ນລັກສະນະອັນພື້ນຖານທີ່ ຕັດຂາດບໍ່ໄດ້ຂອງວັດຖຸ. ໃນວິທະຍາສາດ, ໃນສັດຈະວິພາກມັນສະແດງອອກໃນ

ຫລັກການສາຍພົວພັນລວມທົ່ວໄປ. ສັດຈະວິພາກສະແດງຕົວເປັນທິດສະດີ ວ່າດ້ວຍສາຍພົວພັນລວມທົ່ວໄປ ແລະ ການອຳນວຍເງື່ອນໄຂເຊິ່ງກັນ ແລະ ກັນລະຫວ່າງບັນດາປະກົດການ.

ການຄົ້ນຄວ້າ ສາຍພົວພັນທີ່ມີຫລາຍຮູບ ຫລາຍແບບ ແມ່ນເສັ້ນທາງທີ່ນຳໄປເຖິງການຄົ້ນພົບບັນດາກົດເກນທີ່ຄອບຄອງຂະບວນວິວັດໃດໜຶ່ງເນື່ອງຈາກວ່າບັນດາກົດເກນແມ່ນປະເພດ ຫລື ແບບທີ່ແນ່ນອນ ຂອງສາຍພົວພັນກັນ, ເພາະວ່າສິ່ງທີ່ຖືກຕ້ອງຕາມກົດເກນນັ້ນ ບໍ່ແມ່ນສາຍພົວພັນໃດໜຶ່ງ ແຕ່ແມ່ນສາຍພົວພັນປະເພດພິເສດ ທີ່ມີລັກສະນະພິເສດຫລາຍຢ່າງ.

ກ່ອນອື່ນໝົດ ກົດເກນມີລັກສະນະລວມທົ່ວໄປ ແລະ ເປັນລັກສະນະ ພິເສດບໍ່ສະເພາະແຕ່ສຳລັບສິ່ງຂອງ ແລະ ປະກົດການບາງຊະນິດເທົ່ານັ້ນ, ແຕ່ແມ່ນສຳລັບຈຳພວກໃດໜຶ່ງໃນຈຳນວນສິ່ງທັງໝົດດັ່ງກ່າວ ຫລືແມ່ນສຳລັບສິ່ງຂອງ ແລະ ປະກົດການທຸກໆຢ່າງ. ສາຍພົວພັນທີ່ຖືກຕ້ອງຕາມກົດເກນ ນັ້ນແມ່ນສາຍພົວພັນທີ່ສຳຄັນ ແລະ ຂາດບໍ່ໄດ້ ໝາຍຄວາມວ່າ ມັນນອນຢູ່ໃນຈຳນວນທາດແທ້ຂອງບັນດາຂະບວນວິວັດ ແລະ ດຳເນີນໄປຢ່າງຫລີກເວັ້ນ ບໍ່ໄດ້ ຖ້າຫາກມີເງື່ອນໄຂອັນເກນາະສົມ. ສາຍພົວພັນສະແດງຕົວເປັນສິ່ງທີ່ ໝັ້ນຄົງແບບໝຽບຖານ ໝາຍຄວາມວ່າ ມັນລົ້ມລົ້ມເກົ່າ ແລະ ດຳເນີນໄປ ຕາມລຳດັບທີ່ແນ່ນອນ, ໃນຮູບແບບທີ່ຮູ້ຈັກກັນມາແລ້ວ, ແຕ່ຫາກບໍ່ແມ່ນດຳເນີນໄປຢ່າງສັບສົນ. ກົດເກນມີລັກສະນະພາວະວິໄສ ໝາຍຄວາມວ່າ ຄົງຢູ່ ແລະມີຜົນບັງຄັບໂດຍບໍ່ຂຶ້ນກັບມານະຈິດ ແລະ ຈິດສຳນຶກຂອງຄົນ. ທັດສະນະນີ້ຂອງລັດທິວັດຖຸນິຍົມສັດຈະວິພາກ ກົງກັນຂ້າມກັບທັດສະນະແບບຈິດຕະນິຍົມ. ນັກຈິດຕະນິຍົມອັດຕະວິໄສປະຕິເສດການຄົງຢູ່ຢ່າງພາວະວິໄສຂອງກົດເກນທຳມະຊາດ ແລະ ສັງຄົມ. ນັກຈິດຕະນິຍົມພາວະວິໄສ ຖືວ່າກົດເກນກຳນົດຂຶ້ນ ມາດ້ວຍກຳລັງຈິດລະດັບສູງ ຄືວິນຍານ, ພະເຈົ້າ, ຜີສາງ ແລະ ອື່ນໆ.

ຕົວຢ່າງງ່າຍດາຍທີ່ສຸດຂອງສາຍພົວພັນທີ່ມີກົດເກນນັ້ນຄື ກົດເກນ ປາສການ ເຊິ່ງໂດຍສອດຄ່ອງກັບກົດເກນດັ່ງກ່າວນີ້ ທາດແຫລວສິ່ງແຮງດັນ ທີ່ກະທົບຕໍ່ມັນນັ້ນໄປທຸກທິດທຸກທາງເທົ່າໆກັນ. ກົດເກນນີ້ໄດ້ສະແດງເຖິງສາຍ ພົວພັນແບບພາວະວິໄສ ລະຫວ່າງແຮງດັນກັບທາດແຫລວ. ມັນແມ່ນສາຍພົວ ພັນລວມທົ່ວໄປ ເພາະວ່າມັນກວມລວມທາດແຫລວທຸກຊະນິດ ແຕ່ບໍ່ແມ່ນ ສຳລັບ

ທາດແຫລວໃດໜຶ່ງເທົ່ານັ້ນ. ມັນມີຄວາມໝາຍສຳຄັນ ແລະ ຈຳເປັນ, ມັນ ສະແດງຕົວອອກທຸກຍາມໃນເມື່ອມີແຮງດັນກະທົບຕໍ່ທາດແຫລວ. ອັນນີ້ ຍງ ໝາຍເຖິງວ່າ ການພົວພັນດັ່ງກ່າວ ໝັ້ນຄົງ ແລະ ມີລັກສະນະລື່ນຄືນ.

ບັນດາກົດເກນກຳນົດສະພາບການຂອງສິ່ງວັດຖຸ ແລະ ຂະບວນວິວັດ ກຳ ນົດທິດທາງ ແລະ ລັກສະນະ ການຂະຫຍາຍຕົວຂອງພວກມັນ. ຄວາມຮູ້ກ່ຽວ ກັບ "ກົດເກນ" ສ່ອງແສງເຖິງຮູບແບບທີ່ໝັ້ນຄົງຂອງສາຍພົວພັນແບບພາວະ ວິໄສ, ແບບລວມ, ສຳຄັນ ແລະ ຈຳເປັນລະຫວ່າງປະກົດການ ທີ່ກຳນົດ - ບາດກ້າວ ແລະ ລັກສະນະການຂະຫຍາຍຕົວຂອງປະກົດການດັ່ງກ່າວ.ຄວາມ ເຂົ້າໃຈກົດເກນທຳມະຊາດ ແລະ ສັງຄົມປະກອບເປັນເງື່ອນໄຂ ທີ່ຈຳເປັນ- ໃຫ້ແກ່ການເຄື່ອນໄຫວທີ່ມີຜົນຂອງຄົນ. ໜ້າທີ່ຂອງທຸກໆວິທະຍາສາດຢູ່ ບ່ອນ ວ່າຕ້ອງຄົ້ນພົບກົດເກນຂອງຂະບວນວິວັດທີ່ມີວິທະຍາສາດດັ່ງກ່າວ, ຄົ້ນຄວ້າ- ແລະ ຊອກຫາເສັ້ນທາງໝູນໃຊ້ກົດເກນນີ້.

ຄຳນິຍາມກົດເກນທີ່ໄດ້ກ່າວມາຂ້າງເທິງນີ້ ພົວພັນເຖິງທຸກໆກົດເກນ.ແຕ່ ກົດເກນແຕກຕ່າງກັນ. ກ່ອນອື່ນໝົດມັນແຕກຕ່າງກັນໃນລະດັບກວມລວມ. ມີ ກົດເກນທີ່ມີລະດັບກວມລວມໜ້ອຍກວ່າ ແລະ ມີກົດເກນທີ່ມີລະດັບກວມ ລວມ ຫລາຍກວ່າ. ເຊັ່ນ ກົດເກນວັດຖຸວິທະຍາ, ເຄມີສາດ, ຊີວະສາດ ທີ່ພົວພັນ ເຖິງຮູບແບບການເຄື່ອນເໜັງທີ່ກ່ຽວຂ້ອງຂອງວັດຖຸ. ແຕ່ມີກົດເກນທີ່ກ່ຽວ - ຂ້ອງເຖິງທຸກໆຮູບແບບການເຄື່ອນເໜັງຂອງວັດຖຸ ກ່ຽວຂ້ອງເຖິງທຸກຂົງເຂດ ຄວາມເປັນຈິງ ເຖິງທຸກໆປະກົດການ ແລະ ມີຜົນບັງຄັບຢູ່ທຸກແຫ່ງຫົນ ແລະ- ທຸກເມື່ອທຸກຍາມ. ນີ້ແມ່ນກົດເກນລວມທົ່ວໄປ ຫລື ກົດເກນທີ່ມີລັກສະນະລວມ ຫລາຍກວ່າ. ສັດຈະວິພາກຄົ້ນຄວ້າກົດເກນເຊັ່ນນີ້ເອງ. ໂດຍມີລັກສະນະ - ລວມທົ່ວໄປ ກົດເກນດັ່ງກ່າວມີຜົນບັງຄັບບໍ່ພຽງແຕ່ໃນໂລກວັດຖຸເທົ່ານັ້ນ ແຕ່ ຍັງມີຜົນບັງຄັບໃນການຮັບຮູ້ ໃນຂະບວນວິວັດຈິນຕະນາການອີກ. ສັດຈະ ວິ ພາກວັດຖຸນິຍົມ ແມ່ນວິທະຍາສາດວ່າດ້ວຍລັກສະນະກວມລວມຫລາຍກວ່າຂອງ ກົດເກນຂະຫຍາຍຕົວຂອງທຳມະຊາດ, ສັງຄົມແລະການຮັບຮູ້.

ສັດຈະວິພາກແຫ່ງການຂະຫຍາຍຕົວຂອງໂລກວັດຖຸນັ້ນ ເປັນແບບພາວະວິ ໄສ ມັນແມ່ນສາຍພົວພັນທີ່ມີກົດເກນລະຫວ່າງປະກົດການ ແລະ ຂະບວນວິວັດ ຂອງຄວາມເປັນຈິງ ແບບພາວະວິໄສ. ສັດຈະວິພາກແຫ່ງການຮັບຮູ້ເປັນແບບ

ອັດຕະວິໄສ, ມັນແມ່ນການສ່ອງແສງສັດຈະວິພາກແບບພາວະວິໄສ ໃນຈິດສຳນຶກຂອງຄົນ. ບັນດາກົດເກນລວມທົ່ວໄປຂອງສັດຈະວິພາກແບບພາວະວິໄສ - ແລະ ອັດຕະວິໄສນັ້ນ ແມ່ນກົດເກນດຽວກັນ ເຖິງວ່າພວກມັນສະແດງອອກ - ຢ່າງແຕກຕ່າງກັນກໍ່ຕາມ. ບັນດາກົດເກນສັດຈະວິພາກພື້ນຖານແມ່ນ ກົດເກນວ່າດ້ວຍຄວາມເປັນເອກະພາບ ແລະ ການຕໍ່ສູ້ລະຫວ່າງສິ່ງທີ່ປໍລະປັກກັນ , ແມ່ນກົດເກນຂ້າມຜ່ານແຕ່ການປ່ຽນແປງດ້ານປະລິມານໄປສູ່ການປ່ຽນແປງ - ດ້ານຄຸນນະພາບ, ແມ່ນກົດເກນການປະຕິເສດແຫ່ງຄວາມປະຕິເສດ.

ມາດຕະເກນເປັນຄວາມຮູ້ພື້ນຖານດ້ານວິທະຍາສາດ. ເຊັ່ນຕົວຢ່າງມາດຕະເກນ ຊີວະສາດແມ່ນປະເພດຊີວະສາດ, ການເລືອກເຟັ້ນທຳມະຊາດ , ການສືບເຊື້ອ; ມາດຕະເກນວັດຖຸວິທະຍາ ແມ່ນມວນສານ ພະລັງງານ ການດຶງດູດຂອງໂລກ; ມາດຕະເກນປັດຊະຍາ ແມ່ນວັດຖຸ, ຄວາມຮັບຮູ້, ການດຳລົງຄົງຕົວ ແລະ ອື່ນໆ. ມາດຕະເກນປັດຊະຍາແຕກຕ່າງກັບມາດຕະເກນວິທະຍາສາດອື່ນໆນັ້ນຢູ່ບ່ອນວ່າ ມັນແມ່ນຄວາມຮັບຮູ້ທີ່ມີລັກສະນະກວມລວມ - ຫລາຍກວ່າ, ມີຄວາມຫມາຍບໍ່ສະເພາະແຕ່ສຳລັບປັດຊະຍາເທົ່ານັ້ນ ແຕ່ຍັງມີຄວາມຫມາຍສຳລັບວິທະຍາສາດອື່ນໆອີກພ້ອມ. ມັນສ່ອງແສງເຖິງຮູບ ແບບລວມທົ່ວໄປຂອງການດຳລົງຄົງຕົວ, (ການເຄື່ອນເຫນັງ, ກາງຫາວ),ດ້ານຕ່າງໆ, ລັກສະນະສະເພາະຂອງປະກົດການ (ຄຸນນະພາບ, ປະລິມານ,ລັກສະນະກົງກັນຂ້າມ), ສາຍພົວພັນ (ລັກສະນະມີສາຍເຫດ), ກາລະການຂະຫຍາຍຕົວ (ການກ້າວກະໂດດ, ການປະຕິເສດ ).

ມາດຕະເກນທີ່ມີການກ່ຽວຂ້ອງເຊິ່ງກັນ ແລະ ກັນ ເຊິ່ງຄົ້ນຄວ້າເປັນຄູ່ໆກັນ (ຮູບແບບແລະເນື້ອໃນ, ທາດແທ້ ແລະ ປະກົດການ ແລະ ອື່ນໆ) ນັ້ນມີຄວາມຫມາຍ ໂດຍສະເພາະ. ການກ່ຽວຂ້ອງກັນລະຫວ່າງມາດຕະເກນສະແດງເຖິງກົດເກນສັດຈະວິພາກລວມທົ່ວໄປ, ເຊິ່ງຕາມ ຫລັກການແລ້ວບໍ່ແຕກຕ່າງກັນກັບບັນດາກົດເກນສັດຈະວິພາກພື້ນຖານ. ແຕ່ຍ້ອນວ່າມັນສະແດງອອກບໍ່ແມ່ນລັກສະນະຕົ້ນຕໍຂອງການຂະຫຍາຍຕົວ ແລະ ເຮັດໃຫ້ກົດເກນພື້ນຖານຄົບຖ້ວນສົມບູນກວ່າເກົ່າ ມັນຈຶ່ງບໍ່ເປັນກົດເກນພື້ນຖານ.

ບັນດາມາດຕະເກນ ແມ່ນຜົນຂອງການຮັບຮູ້ສິ່ງແວດລ້ອມຂອງຄົນໃນ ໄລຍະຫລາຍສະຕະວັດ ແມ່ນຂັ້ນຕ່າງໆທີ່ການຮັບຮູ້ຂອງຄົນໄດ້ກ້າວຫນ້າຂຶ້ນ ທ່າມ

ກາງການຮັບຮູ້ຄວາມເລິກລັບຂອງທຳມະຊາດ ແລະ ສັງຄົມ. ພ້ອມກັນ ນັ້ນ ມາດຕະເກນ ແມ່ນອາວຸດສຳລັບການຮັບຮູ້ທົ່ວໄປ, ແມ່ນພາຫະນະເພື່ອໄຈ້ແຍກປະກົດການ, ເຫດການຕົວຈິງ ແລະ ບັນຫາຢ່າງຖືກຕ້ອງ ແລະ ມີວິທະຍາສາດ.

## ໔. ຄວາມໝາຍຂອງສັດຈະວິພາກວັດຖຸນິຍົມ

ໃນຖານະເປັນທິດສະດີລວມ ວ່າດ້ວຍການຂະຫຍາຍຕົວ, ໂດຍອີງໃສ່ຫຼັກທິດສະດີ, **ຫຼາຍຫຼັກການ,** ກົດເກນ ແລະ ມາດຕະເກນສັດຈະວິພາກສະຫຼຸບສັງລວມຄວາມສຳຄັນ ສຳລັບການຮັບຮູ້ ແລະ ການເຄື່ອນໄຫວແລະດ້ວຍເຫດນັ້ນເອງ ສະແດງຕົວເປັນແບບວິທີລວມທົ່ວໄປ. ເຈາະຈົງເວົ້າສະເພາະ ແລ້ວ ມີຂໍ້ຄວາມສະຫຼຸບທີ່ສຳຄັນທີ່ສຸດສຳລັບການເຄື່ອນໄຫວປະຕິວັດ ແລະ ການຮັບຮູ້ນັ້ນໄດ້ຖອດຖອນອອກຈາກກົດເກນຂະຫຍາຍຕົວ ແລະ ການພົວພັນລວມ ທົ່ວໄປ. ໃນເບື້ອງຕົ້ນຕ້ອງເຈາະຈົງຈຸດສຳຄັນຢູ່ບ່ອນວ່າ ແນວຄິດຂະຫຍາຍຕົວມີລັກສະນະປະຕິວັດໃນທາດແທ້ຂອງມັນ. ຖ້າຫາກທຸກສິ່ງໃນໂລກລ້ວນແຕ່ ຂະຫຍາຍຕົວ ແລະ ບໍ່ມີສິ່ງໃດຄົງທີ່ ແລະ ບໍ່ປ່ຽນແປງ ຢ່າງເດັດຖານແລ້ວ , ແມ່ນວ່າຊີວິດສັງຄົມ ກໍ່ຂະຫຍາຍຕົວ, ລະບອບສັງຄົມໜຶ່ງຈະຕ້ອງຖືກແທນ ທີ່ດ້ວຍລະບອບສັງຄົມອື່ນ ທີ່ຢູ່ໃນລະດັບການຂະຫຍາຍຕົວສູງກວ່າ.ໝາຍຄວາມວ່າການຕໍ່ສູ້ຂອງຊາວຜູ້ອອກແຮງງານຕ້ານລັດທິທຶນນິຍົມ ເພື່ອສັງຄົມນິຍົມແລະກອມມູນິດນິຍົມນັ້ນ ມີລັກສະນະຖືກຕ້ອງຕາມກົດເກນ.

ຫຼັກສັດຈະວິພາກວ່າດ້ວຍການຂະຫຍາຍຕົວ ເຮັດໃຫ້ມີຄວາມ ເຊື່ອໝັ້ນວ່າ ມີສິ່ງໃໝ່ໃນສັງຄົມ ຈຶ່ງບໍ່ມີໃຜຕ້ານທານໄດ້. ສິ່ງໃໝ່ ແມ່ນສິ່ງທີ່ສົມບູນ ແລະ ມີຊີວິດຊີວາກວ່າ, ທີ່ເຕີບໃຫຍ່ ແລະ ເຂັ້ມແຂງຂຶ້ນໃນການຂະຫຍາຍ-ຕົວ.ບໍ່ມີໃຜຕ້ານທານມັນໄດ້ ກໍ່ຍ້ອນວ່າມັນເກີດຂຶ້ນມາຕາມກົດເກນ ທ່າມກາງການຂະຫຍາຍຕົວແບບພາວະວິໄສ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ - ຂອງຊີວິດດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ ຕອບສະໜອງຜົນປະໂຫຍດ - ຂອງຊົນຊັ້ນປະຕິວັດ. ແຕ່ສິ່ງໃໝ່ຈະບໍ່ຊະນະຢ່າງອັດຕະ ໂນມັດໄດ້.ໄຈ້ແຍກ

ສິ່ງໃໝ່ໃຫ້ຖືກຕ້ອງ (ແລະໃນ**ເບື້ອງຕົ້ນ** ມັນມັກຈະເປັນສິ່ງທີ່ບໍ່ສັງເກດ ເຫັນໄດ້ງ່າຍ ແລະ ອ່ອນນ້ອຍ) ແລ້ວຕ້ອງຕໍ່ສູ້ປ້ອງກັນມັນຢ່າງຕື່ນຕົວ ແລະມີການຈັດຕັ້ງ.

ຕໍ່ໄປ ຖ້າຫາກທຸກໆປະກົດການ**ຂະຫຍາຍຕົວ** ແມ່ນຕ້ອງລົງມືຄົ້ນຄວ້າ ປະກົດການດັ່ງກ່າວໃນທັດສະນະຂະຫຍາຍຕົວ ສັງເກດໄຈ້ແຍກວ່າມັນເກີດ ຂຶ້ນ ແລະສ້າງຕັ້ງຂຶ້ນມາຢ່າງໃດ ມີການປ່ຽນແປງຫຍັງແດ່ ແລະ ໃນປະຈຸບັນນີ້ໄດ້ກາຍເປັນຫຍັງແລ້ວ.

ສັດຈະວິພາກຍັງສິດສອນໃຫ້ຮັບຮູ້ປະກົດການໂດຍອີງຕາມສາຍພົວພັນພາຍໃນ ແລະ ພາຍນອກຂອງມັນ.ຖ້າຫາກບໍ່ມີທັດສະນະນີ້ແລ້ວ ກໍ່ບໍ່ສາມາດ ເຂົ້າໃຈທາດແທ້ຂອງປະກົດການດັ່ງກ່າວ. ຟ.ອັງແກນ ໄດ້ໃຫ້ຂໍ້ສັງເກດວ່າ ບໍ່ສາມາດຈະເວົ້າ ຫຍັງໄດ້ກ່ຽວກັບສິ່ງວັດຖຸ **ຢູ່ນອກການເຄື່ອນເໜັງ**, ນອກການພົວພັນໃດໆ ກັບສິ່ງວັດຖຸອື່ນໆ.

ໂດຍສອດຄ່ອງກັບກົດເກນຂະຫຍາຍຕົວ ແລະ ການພົວພັນກັນ ຈຳຕ້ອງມີທັດສະນະປະຫວັດສາດ **ແລະລະອຽດກ່ຽວກັບປະກົດການທີ່ພວມຄົ້ນຄວ້າ** ຕ້ອງມີການໄຈ້ແຍກຢ່າງລະອຽດຕໍ່ສະພາວະການປະຫວັດສາດທີ່ມີຢູ່. ແຕ່ລະປະກົດການ ແລະ ເຫດການຕ້ອງໄດ້ຮັບການຄົ້ນຄວ້າໂດຍອີງໃສ່ເງື່ອນໄຂລະອຽດ-ຂອງທີ່ຕັ້ງ ແລະ ກາລະເວລາ ທີ່ມັນໄດ້ເກີດຂຶ້ນ ແລະ ຂະຫຍາຍຕົວ. ວ.ອີ ເລນິນ ໄດ້ຂຽນວ່າ: "ຈິດໃຈຂອງລັດທິມາກທັງໝົດ ຕະຫລອດທັງລະບົບຂອງລັດທິມາກ ຮຽກຮ້ອງໃຫ້ທຸກໆທັດສະນະວິເຄາະໄຈ້ແຍກ ສະເພາະແຕ່-ດ້ານປະຫວັດສາດ, ສະເພາະ ແຕ່ການພົວພັນ ຊຶ່ງກັນແລະກັນ, ສະເພາະແຕ່ບົດຮຽນປະຫວັດສາດຕົວຈິງ" ໑).

ລັກສະນະສະເພາະຂອງທັດສະນະແບບຄຳພີຕາຍຕົວ ແລະ ແບບອະພິທຳກ່ຽວກັບເຫດການ ແລະ ບັນຫານັ້ນ ແມ່ນບໍ່ຮູ້ໄຈ້ແຍກເງື່ອນໄຂປະຫວັດສາດທີ່ພວມປ່ຽນແປງຢ່າງລະອຽດ. ຈາກນັ້ນຈຶ່ງເກີດມີຄວາມຜິດພາດທາງດ້ານທິດ-ສະດີ ແລະ ການເມືອງຫລາຍປະການຂອງພວກທີ່ຍຶດຖືຫລັກຄຳພີຕາຍຕົວແລະພັກພວກອຽງຊ້າຍຕ່າງໆ. ແຕ່ລັດທິຄຳພີຕາຍຕົວບໍ່ມີແຕ່ພຽງຢູ່ໃນຂົງເຂດການ

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ, ເຫລັ້ມ ໔໙, ໜ້າ ໓໒໙.

ເມືອງເທົ່ານັ້ນ. ມັນມັກມີຢູ່ໃນວຽກງານຕົວຈິງປະຈຳວັນເລື້ອຍໆ ແລະ ກໍ່ຜົນ
ຮ້າຍ ທີ່ສະແດງອອກໃນການແກ້ໄຂບັນຫາແບບຕາຍຕົວ, ໃນການຢ້ານ ກົວ
ສິ່ງໃຫມ່, ໃນຄວາມພະຍາຍາມຣັກສາສິ່ງທີ່ຫລ້າຫລັງໄປແລ້ວ.

ທັດສະນະປະຫວັດສາດລະອຽດ ແລະ ການຄົ້ນຄວ້າບັນດາປະກົດການ -
ຢ່າງຮອບດ້ານໄດ້ສ່ອງແສງອອກໃນທິດສະດີ ເລນິນ ວ່າດ້ວຍຕ່ອງໂສ້ຕົ້ນຕໍໃນ
ສາຍໂສ້ຂອງປະກົດການໃນປະຫວັດສາດ. ຊີວິດສັງຄົມແມ່ນການສັບປົນຄົນເລ
ຂອງເຫດການ ແລະ ປະກົດການ, ມັນຄືກັນກັບສາຍໂສ້ທີ່ມີຕ່ອງໂສ້ຈຳນວນ-
ຫລວງຫລາຍ. ສີລະປະໃນການນຳພາ ແມ່ນຮູ້ຈັກຊອກຫາຕ່ອງໂສ້ທີ່ສຳຄັນ -
ກວ່າໝູ່ໃນສາຍໂສ້ແຫ່ງປະກົດການ ເຊິ່ງການແກ້ໄຂທຸກໆຫນ້າທີ່ ທີ່ເກີດ ຂຶ້ນ
ມາໃນໄລຍະທີ່ກ່ຽວຂ້ອງຂອງການຂະຫຍາຍຕົວນັ້ນ ລ້ວນແຕ່ຂຶ້ນກັບມັນ.

ສັດຈະວິພາກວັດຖຸນິຍົມເອົ້າລວມ ແມ່ນພື້ນຖານທິດສະດີ ແລະ ແບບ ວິທີ
ຂອງການວາງທິດທາງການເມືອງ, ຍຸດທະສາດ ແລະ ຍຸດທະວິທີຂອງການຕໍ່
ສູ້ຂອງຊົນຊັ້ນກຳມະກອນ, ຂອງພັກກອມມູນິດຕ່າງໆ, ຂອງການປະຕິບັດຫນ້າ
ທີ່ກໍສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ ແບບມີຫົວຄິດປະດິດສ້າງ, ຂອງ
ການນຳພາສັງຄົມແບບມີວິທະຍາສາດ, ຂອງການຄຸ້ມ ຄອງບັນດາຂະບວນ ວິ
ວັດໃນສັງຄົມ. ການຄົ້ນຄວ້າສັດຈະວິພາກເສີມຂະຫຍາຍຈິນຕະນາການ ແບບ
ສັດຈະວິພາກ, ທັດສະນະປະດິດສ້າງໃນວຽກງານ, ການມີໄຫວພິບໃນການຕີ
ລາຄາ ແລະ ແກ້ໄຂບັນຫາ, ຄວາມສະຫລາດສະຫລຽວໃນການເບິ່ງ ກວ້າງ
ເຫັນໄກ.

## ພາກທີ ຫ້າ

## ກົດເກນ ແລະ ມາດຕະເກນສັດຈະວິພາກວັດຖຸນິຍົມ

### ໑. ຄວາມເປັນເອກະພາບ ແລະການຕໍ່ສູ້ຂອງສິ່ງກົງກັນຂ້າມ

ເປັນຫຍັງໃນທຳມະຊາດ ແລະ ສັງຄົມຈຶ່ງມີການປ່ຽນແປງທີ່ເອົາສັງເກດເຫັນໄດ້ ? ກົດເກນເອກະພາບ ແລະ ການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມ ໄດ້ໃຫ້ຄຳຕອບຕໍ່ບັນຫານີ້. ມັນເຜີຍໃຫ້ເຫັນເຖິງສາຍເຫດພາຍໃນຂອງການ ຂະຫຍາຍຕົວ **ໂດຍຊີ້ບອກວ່າ** ຕົ້ນເຫດຂອງມັນນອນຢູ່ໃນລັກສະນະຂັດແຍ່ງ ກັນຂອງສິ່ງຂອງ ແລະ ຂະບວນວິວັດ ໃນການກະທົບຊຶ່ງກັນ ແລະ ກັນ, ໃນການຕໍ່ສູ້ລະ ຫວ່າງສິ່ງກົງກັນຂ້າມທີ່ມີຢູ່ໃນຕົວພວກມັນເອງ. ດ້ວຍເຫດນີ້ ກົດເກນນີ້ຈຶ່ງເປັນກົດເກນສັດຈະວິພາກທີ່ສຳຄັນ ແລະ ເປັນໃຈກາງ. ວ.ອີ. ເລນິນຮຽກມັນເປັນທາດແທ້, ແກ່ນສານຂອງສັດຈະວິພາກ. ກົດເກນສັດຈະວິພາກອື່ນໆລ້ວນແຕ່ຂຶ້ນກັບກົດເກນນີ້.

ສິ່ງກົງກັນຂ້າມນັ້ນ ແມ່ນດ້ານ, ກຳລັງແຮງ, ທ່າອຽງຂອງປະກົດ ການທີ່ກົງກັນຂ້າມກັນ. ສິ່ງກົງກັນຂ້າມປະຕິເສດ, ກີດກັນຊຶ່ງກັນ ແລະ ກັນແລະໃນຂະນະດຽວກັນນັ້ນກໍ່ສ້າງເງື່ອນໄຂໃຫ້ແກ່ກັນ. ສິ່ງກົງກັນຂ້າມປະກອບເປັນດ້ານ, ພາກສ່ວນຂອງຄວາມຂັດແຍ່ງກັນ. ຄວາມຂັດແຍ່ງ ແມ່ນສາຍພົວ ພັນຊຶ່ງກັນ ແລະ ກັນລະຫວ່າງສິ່ງກົງກັນຂ້າມ. ສັດຈະວິພາກໃຈ້ແຍກແຕ່ລະສິ່ງວັດຖຸວ່າເປັນຄືຜົນບວກ, ວ່າເປັນຄືຄວາມເປັນເອກະພາບຂອງສິ່ງກົງກັນຂ້າມທຸກສິ່ງຂອງ ແລະ ປະກົດການຂອງທຳມະຊາດ, ຂອງສັງຄົມແລະຂອງ ການຮັບຮູ້ນັ້ນລ້ວນແຕ່ຂັດກັນຢູ່ພາຍໃນ, ທັງຫມົດນີ້ຢັ້ງຢືນເຖິງລັກສະນະລວມທົ່ວໄປຂອງຄວາມຂັດແຍ່ງ, ຢັ້ງຢືນເຖິງລັກສະນະລວມທົ່ວໄປຂອງກົດເກນດັ່ງກ່າວ.

ເຊັ່ນຕົວຢ່າງໃນທຳມະຊາດທີ່ບໍ່ມີຊີວິດ ເວລາໃດກໍ່ມີການກະທົບຂອງ ກຳ

ລັງແຮງດຶງດູດ ແລະ ຊຸກດັນ, ກະແສໄຟຟ້າບວກ ແລະ ລົບ. ທຸກສິ່ງມີຊີວິດລ້ວນແຕ່ມີການກະທົບເຊິ່ງກັນ ແລະ ກັນຂອງຂະບວນວິວັດທີ່ກົງກັນຂ້າມກັບລັກສະນະນັ້ນ, ເຊັ່ນ ການເຊື່ອມຊຶມເຂົ້າ ແລະ ການຍູ້ອອກ. ການເຊື່ອມຊຶມ - ເຂົ້າ ແມ່ນຮ່າງກາຍລະລາຍທາດບຳລຸງ ແລະ ຫັນປ່ຽນທາດດັ່ງກ່າວໃຫ້ເປັນຈຸລັງ ແລະ ເຍື່ອບາງ. ການຍູ້ອອກແມ່ນການທຳລາຍທາດທີ່ມີຊີວິດທີ່ປະກອບດ້ວຍຈຸລັງ ແລະ ເຍື່ອບາງ.

ຖ້າຫາກພວກເຮົາມາເບິ່ງຊີວິດສັງຄົມແລ້ວ ຈະເຫັນວ່າສັງຄົມທີ່ມີຄົນ ຊູດຣິດຄົນນັ້ນ ປະກອບດ້ວຍຊົນຊັ້ນທີ່ເປັນປໍລະປັກກັນ, ເຊິ່ງມີຖານະ ແລະຜົນປະໂຫຍດຂັດກັນ ແລະ ບໍ່ອາດຈະຢູ່ຮ່ວມກັນໄດ້, ຄືຂ້າທາດ ແລະ ເຈົ້າທາດ , ຊາວນາ ແລະ ພວກສັກດີນາ, ກຳມາຊີບ ແລະ ນາຍທຶນ.

ສ່ວນຄວາມຮັບຮູ້ນັ້ນກໍ່ມີສິ່ງກົງກັນຂ້າມເຊັ່ນສັດຈະທຳ ແລະ ຄວາມ ຈອມປອມ, ສິ່ງທຽບຖານ ແລະ ເດັດຖານໃນຄວາມຮູ້ຂອງຄົນ ແລະອື່ນໆອີກ.

ການກະທົບຊຶ່ງກັນແລະກັນ ລະຫວ່າງສິ່ງກົງກັນຂ້າມທີ່ຢູ່ພາຍໃນ ປະກົດການນັ້ນເປັນແນວໃດ ? ມັນກວມລວມທັງຄວາມເປັນເອກະພາບ ທັງການຕໍ່ສູ້ກັນລະຫວ່າງສິ່ງກົງກັນຂ້າມ.

ຄວາມເປັນເອກະພາບກັນລະຫວ່າງສິ່ງກົງກັນຂ້າມນັ້ນ ຫມາຍຄວາມ ວ່າ ມັນປະກອບດ້ວຍດ້ານທີ່ ຕັດຂາດອອກຈາກກັນບໍ່ໄດ້ຂອງປະກົດການແລະກຳນົດເງື່ອນໄຂໃຫ້ແກ່ກັນ ຫມາຍຄວາມວ່າອີງຕໍ່ຊຶ່ງກັນແລະກັນ, ສິ່ງກົງກັນຂ້າມ ບໍ່ສາມາດຄົງຢູ່ຢ່າງແຍກຕົວອອກຈາກກັນໄດ້,ສ່ວນທຸກສິ່ງວັດຖຸ, ປະກົດການ ບໍ່ສາມາດຄົງຢູ່ນອກຄວາມເປັນເອກະພາບ ແລະ ການກະທົບຊຶ່ງກັນແລະກັນ - ຂອງພວກມັນ. ເຊັ່ນຕົວຢ່າງ ບໍ່ອາດຈະຕັດແບ່ງຂົ້ວເຫນືອຂອງແມ່ເຫລັກອອກຈາກຂົ້ວໃຕ້ຂອງມັນ ເພາະວ່າແມ່ເຫລັກເວລາໃດ ກໍ່ແມ່ນຄວາມເປັນເອກະພາບຂອງພວກມັນ. ເຊັ່ນດຽວກັນກັບບໍ່ມີການເຊື່ອມຊຶມເຂົ້າໂດຍປາສະ ຈາກການຍູ້ອອກ, ແລະ ບໍ່ມີສິ່ງມີຊີວິດໂດຍປາສະຈາກຄວາມເປັນເອກະພາບແລະການກະທົບຊຶ່ງກັນແລະກັນຂອງການເຊື່ອມຊຶມເຂົ້າ ແລະການຍູ້ອອກ.

ໃນຂະນະທີ່ຢູ່ໃນຄວາມເປັນເອກະພາບ ສິ່ງກົງກັນຂ້າມທຳການ "ຕໍ່ສູ້ " ກັນ. ການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມແມ່ນການກົດກັນ ແລະ ການປະຕິເສດລະຫວ່າງພວກມັນ. ດັ່ງທີ່ ວ.ອີ.ເລນິນ ໄດ້ສັ່ງສອນນັ້ນ ຖ້າວ່າຄວາມ ເປັນ

ເອກະພາບຂອງສິ່ງກົງກັນຂ້າມ ເປັນລັກສະນະຫຽບຖານແລ້ວ ແມ່ນວ່າການຕໍ່ສູ້ລະຫວ່າງພວກມັນເປັນລັກສະນະເດັດຖານ, ເຊັ່ນດຽວກັນກັບການຂະຫຍາຍຕົວ ແລະ ການເຄື່ອນເໜັງເປັນລັກສະນະເດັດຖານ. ການຕໍ່ສູ້, ການ ຂັດແຍ່ງຊຶ່ງກັນແລະກັນ ລະຫວ່າງສິ່ງກົງກັນຂ້າມ ລະຫວ່າງດ້ານ ແລະ ທ່າອຽງທີ່ນອນຢູ່ໃນຄວາມເປັນເອກະພາບກັນນັ້ນ ເປັນການຍູ້ໜູນໃຫ້ແກ່ການ ເຄື່ອນເໜັງ ແລະການປ່ຽນແປງ, ມັນນຳໄປເຖິງການທີ່ຄຸນນະພາບ ແລະຮູບແບບເກົ່າສູນຫາຍໄປ ແລະ ເກີດມີຄຸນນະພາບ ແລະ ຮູບແບບໃໝ່. ດັ່ງ ຟ.ອັງແກນ ໄດ້ໃຫ້ຂໍ້ສັງເກດວ່າ ການໄຈ້ແຍກສິ່ງກົງກັນຂ້າມ ການຕໍ່ສູ້ຂອງສິ່ງ ດັ່ງກ່າວ ແລະ ການແກ້ໄຂການຕໍ່ສູ້ນີ້ ແມ່ນຈຸດລິເລີ່ມຂອງການຂະຫຍາຍຕົວທຸກໆປະການ.

ເພື່ອເປັນການອະທິບາຍຫລັກທິດສະດີລັດທິມາກທີ່ສຳຄັນທີ່ສຸດນີ້ ໃຫ້ ແຈ່ມແຈ້ງຕື່ມ ພວກເຮົາອາດຈະໄຈ້ແຍກເບິ່ງການກະທົບຊຶ່ງກັນລະຫວ່າງກຳມະພັນ ແລະ ສິ່ງທີ່ປ່ຽນແປງ, ເຊິ່ງເປັນລັກສະນະພິເສດທີ່ກົງກັນຂ້າມກັນ, ເປັນທ່າອຽງໃນການຂະຫຍາຍຕົວຂອງສິ່ງທີ່ມີຊີວິດ. ກຳມະພັນແມ່ນທ່າອຽງຮັກສາຄົງເດີມ ທີ່ສະແດງເຖິງລັກສະນະໝັ້ນຄົງຂອງຮ່າງກາຍ. ຍ້ອນມີກຳມະພັນຮ່າງກາຍຈຶ່ງຮັກສາລັກສະນະພິເສດ ແລະ ລັກສະນະສະເພາະຂອງຕົນ.ສິ່ງທີ່ປ່ຽນແປງແມ່ນທ່າອຽງທີ່ສະແດງເຖິງຄວາມສາມາດຂອງຮ່າງກາຍໃນການຟື້ນຟູຄືນໃໝ່, ເຮັດໃຫ້ມັນມີລັກສະນະພິເສດໃໝ່ຂຶ້ນ. ການຂະຫຍາຍຕົວຂອງຮ່າງ-ກາຍດຳເນີນໄປບົນພື້ນຖານຄວາມເປັນເອກະພາບ ແລະ ຄວາມຂັດແຍ່ງ ຊຶ່ງກັນແລະກັນ ລະຫວ່າງບັນດາທ່າອຽງດັ່ງກ່າວນີ້. ຖ້າຫາກມີແຕ່ສິ່ງທີ່ປ່ຽນແປງຫລືມີແຕ່ກຳມະພັນເທົ່ານັ້ນ ການຂະຫຍາຍຕົວກໍ່ບໍ່ອາດຈະເປັນໄປໄດ້.ພຽງແຕ່ການຂັດແຍ່ງຊຶ່ງກັນແລະກັນລະຫວ່າງພວກມັນທ່າມກາງຂະບວນວິວັດ ການເລືອກເຟັ້ນທຳມະຊາດເທົ່ານັ້ນ ເປັນສິ່ງເຮັດໃຫ້ຮ່າງກາຍເດີນຕາມເສັ້ນທາງດັດປ່ຽນຕົນໃຫ້ສົມບູນຂຶ້ນ.

ຕົ້ນກຳເນີດຂອງການຂະຫຍາຍຕົວຂອງຊີວິດສັງຄົມນັ້ນ ກໍ່ແມ່ນການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມເຊັ່ນດຽວກັນ. ເຊັ່ນຕົວຢ່າງ ກຳລັງຊຸກດັນການຂະ - ຫຍາຍຕົວຂອງສັງຄົມທີ່ມີຄົນຂູດຮີດຄົນນັ້ນ ແມ່ນການຕໍ່ສູ້ຊົນຊັ້ນ. ພຽງແຕ່ຜ່ານການຕໍ່ສູ້ນີ້ ແລະ ຜ່ານຮູບແບບລະດັບສູງຂອງມັນ ຄືການປະຕິວັດທາງ ສັງຄົມ

ເທົ່ານັ້ນ ຈຶ່ງພາໃກ້ເກີດມີການຂ້າມຜ່ານຈາກລະບອບສັງຄົມໜຶ່ງ ຂຶ້ນໄປເຖິງລະບອບສັງຄົມອື່ນ ທີ່ມີລະດັບສູງກວ່າ. ໃນຂະບວນວິວັດຂອງການຮັບຮູ້ ກໍ່ມີຄວາມຂັດແຍ່ງເຊັ່ນດຽວກັນ ແລະ ຄວາມຂັດແຍ່ງເຫຼົ່ານີ້ຊຸກຍູ້ການ ເຄື່ອນເໜັງຂອງການຮັບຮູ້.

ດັ່ງນີ້, ການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມ, ຄວາມຂັດແຍ່ງພາຍໃນ ປະກອບເປັນຕົ້ນເຫດພື້ນຖານຂອງການເຄື່ອນເໜັງ ແລະ ການຂະຫຍາຍຕົວ - ຂອງທຸກສິ່ງວັດຖຸ ແລະ ປະກົດການ.

ດັ່ງດຽວກັບທຸກສິ່ງທຸກຢ່າງໃນໂລກນີ້ ຄວາມຂັດແຍ່ງກໍ່ຂະຫຍາຍຕົວ ແລະ ຜ່ານໄລຍະ ແລະ ຂັ້ນຕ່າງໆເຊັ່ນດຽວກັນ. ຂັ້ນຕ່າງໆຂອງການຂະຫຍາຍຕົວ ຂອງຄວາມຂັດແຍ່ງນັ້ນ ແມ່ນຄວາມແຕກຕາງທາງດ້ານທາດແທ້, ແມ່ນ ສິ່ງກົງກັນຂ້າມ * ແມ່ນການປະທະກັນ. ຄວາມແຕກຕ່າງກັນທາງດ້ານ ທາດແທ້ ສາມາດຖືເປັນຂັ້ນຕົ້ນຂອງຄວາມຂັດແຍ່ງ. ສິ່ງກົງກັນຂ້າມແມ່ນຄວາມ ຂັດ - ແຍ່ງທີ່ຂະຫຍາຍຕົວ. ການປະທະກັນແມ່ນຄວາມຂັດແຍ່ງທີ່ຮ້າຍແຮງເຖິງ ຂະໜາດ, ແມ່ນຂັ້ນສຸດທ້າຍໃນການຂະຫຍາຍຕົວຂອງຄວາມຂັດແຍ່ງ.

ດ້ານທີ່ປະກອບເປັນສິ່ງຂັດແຍ່ງກັນນັ້ນ ບໍ່ມີຄວາມໝາຍເທົ່າກັນ. ໃນຈຳນວນນີ້ມີດ້ານໜຶ່ງມີລັກສະນະຕົ້ນຕໍ, ນຳໜ້າ ແລະ ຕັດສິນຊີ້ຂາດລັກສະ ນະສະເພາະຂອງທັງໝົດປະກົດການ, ແລະ ມີອີກດ້ານໜຶ່ງ ບໍ່ມີລັກສະນະຕົ້ນຕໍ. ຕົວຢ່າງໃນຄວາມຂັດແຍ່ງລະຫວ່າງກຳມາຊີບ ແລະ ນາຍທຶນໃນສັງຄົມທຶນນິ-ຍົມນັ້ນ ນາຍທຶນມີຖານະເປັນຜູ້ປົກຄອງ, ທີ່ເປັນຜູ້ຕັດສິນລັກສະນະຂອງລະ - ບອບສັງຄົມແບບນີ້. ທ່າມກາງການຂະຫຍາຍຕົວຂອງຄວາມຂັດແຍ່ງ ການພົວພັນກັນ ແລະ ບົດບາດຂອງແຕ່ລະດ້ານ ໃນການຂັດແຍ່ງອາດຈະມີການ ປ່ຽນແປງ. ຄືພາຍຫຼັງທີ່ໄດ້ສ້າງຕັ້ງຜະເດັດການຂອງຊົນຊັ້ນກຳມາຊີບແລ້ວຄວາມຂັດແຍ່ງລະຫວ່າງນາຍທຶນທີ່ບໍ່ທັນຖືກດັບສູນເທື່ອ ແລະ ຊົນຊັ້ນກຳມະກອນ ນັ້ນຍັງຄົງສືບຕໍ່ໄປອີກ. ແຕ່ການພົວພັນກັນລະຫວ່າງດ້ານຕ່າງໆໃນນັ້ນ ໄດ້ມີການ

---

* ຄຳສັບ "ສິ່ງກົງກັນຂ້າມ" ບໍ່ພຽງແຕ່ໝາຍເຖິງດ້ານທີ່ກົງກັນຂ້າມກັນຂອງປະກົດການເທົ່ານັ້ນ, ແຕ່ຍັງໝາຍເຖິງຂັ້ນ ທີ່ແນ່ນອນ ຂອງການ ຂະຫຍາຍຕົວຂອງຄວາມຂັດແຍ່ງນຳອີກ.

ປ່ຽນແປງໃນພື້ນຖານ. ດ້ານຕົ້ນຕໍໃນຄວາມຂັດແຍ່ງນັ້ນ ແມ່ນຊົນຊັ້ນ ກຳມະກອນ ຊຶ່ງມາຈາກຊົນຊັ້ນທີ່ຖືກກົດຂີ່ແລ້ວກາຍມາເປັນຊົນຊັ້ນປົກຄອງ, ໃນເວລາດຽວກັນນັ້ນ ນາຍທຶນໄດ້ສູນເສຍຖານະເປັນເຈົ້າຂອງຕົນ ແລະ ຈະເປັນຊົນຊັ້ນທີ່ຖືກດັບສູນ.

ຄວາມຂັດແຍ່ງ ອັນມີຫລາຍຮູບຫລາຍແບບ ແລະ ແຕກຕ່າງກັນ ໃນດ້ານການປະພຶດ, ລັກສະນະ, ຄວາມໝາຍ, ວິທີແກ້ໄຂ ແລະ ອື່ນໆ. ມັນອາດຈະເປັນການຂັດແຍ່ງພາຍໃນ ແລະ ພາຍນອກ, ພື້ນຖານແລະບໍ່ພື້ນຖານ, ປໍລະປັກ ແລະ ບໍ່ປໍລະປັກ.

ຄວາມຂັດແຍ່ງພາຍໃນເກີດຂຶ້ນ ລະຫວ່າງດ້ານທີ່ກົງກັນຂ້າມກັນຂອງ ປະກົດການໃດໜຶ່ງ. ຄວາມຂັດແຍ່ງພາຍນອກ ແມ່ນຄວາມຂັດແຍ່ງຂອງ ປະກົດການ ດັ່ງກ່າວກັບປະກົດການແລະຂະບວນວິວັດອື່ນໆ. ຄວາມໝາຍຕັດສິນ ຊີ້ຂາດໃນການຂະຫຍາຍຕົວຂອງປະກົດການດັ່ງກ່າວນັ້ນ ໄດ້ແກ່ຄວາມ ຂັດແຍ່ງພາຍໃນ ເນື່ອງຈາກວ່າ ມັນພົວພັນກັບເນື້ອໃນ ແລະ ທາດແທ້ຂອງປະກົດ - ການດັ່ງກ່າວ, ຈຶ່ງປະກອບເປັນພື້ນຖານຂອງການຂະຫຍາຍຕົວແລະ ການປ່ຽນແປງຂອງມັນ.

ຄວາມຂັດແຍງພາຍນອກກໍ່ສົ່ງຜົນສະທ້ອນໃສ່ການຂະຫຍາຍຕົວຂອງປະກົດການ, ຕໍ່ຂະບວນວິວັດພາຍໃນຂອງມັນ ເຊັ່ນດຽວກັນ. ບົດຮຽນຂອງປະເທດໂຊວຽດ ແລະ ບັນດາປະເທດສັງຄົມນິຍົມອື່ນໆ ຊີ້ແຈງໃຫ້ເຫັນວ່າ ການ ກໍ່ສ້າງສັງຄົມນິຍົມຢ່າງມີຜົນສຳເລັດ ໃນປະເທດນີ້ ຫລືປະເທດນັ້ນ ພົວພັນເຖິງການແກ້ໄຂຄວາມຂັດແຍ່ງພາຍໃນຈຳນວນໜຶ່ງ ເຊິ່ງຄວາມຂັດແຍ່ງທີ່ສຳຄັນ-ໃນນັ້ນແມ່ນຄວາມຂັດແຍ່ງລະຫວ່າງຊາວຜູ້ອອກແຮງງານ ກັບບັນດາຊົນຊັ້ນກົດຂີ່ຂູດຮີດທີ່ຖືກໂຄ່ນລົ້ມລົງໄປແລ້ວ. ນັ້ນແມ່ນຄວາມຂັດແຍ່ງອັນດັງດັ່ງທີ່ວ່າ "ໃຜເອົາຊະນະໃຜ" ເຊິ່ງ ວ.ອີ.ເລນິນ ໄດ້ເວົ້າເຖິງຫລາຍຄັ້ງໃນບົດນິພົນ ໃນສະໄໝອຳນາດໂຊວຽດ. ໃນຂະນະດຽວກັນນັ້ນ ຄວາມຂັດແຍ່ງພາຍນອກ ຄື ລະຫວ່າງລະບອບສັງຄົມນິຍົມ ແລະ ລະບອບທຶນນິຍົມໃນໂລກນັ້ນ ກໍ່ສົ່ງຜົນສະທ້ອນຕໍ່ການກໍ່ສ້າງສັງຄົມນິຍົມເຊັ່ນດຽວກັນ. ແຕ່ການແກ້ໄຂຄວາມຂັດແຍ່ງດັ່ງກ່າວຂຶ້ນກັບການຂະຫຍາຍຕົວພາຍໃນຂອງບັນດາປະເທດສັງຄົມນິຍົມແລະ ບັນດາປະເທດທຶນນິຍົມເປັນຕົ້ນຕໍ.

ຄວາມຂັດແຍ່ງພາຍໃນ ທີ່ມີບົດບາດຕັດສິນຊີ້ຂາດໃນການຂະຫຍາຍ ຕົວຂອງສິ່ງວັດຖຸ ຫລື ຂະບວນວິວັດນັ້ນ ແມ່ນຄວາມຂັດແຍ່ງຕົ້ນຕໍ ໃນຈຳນວນຫຼາກຫຼາຍຄວາມຂັດແຍ່ງ. ມັນພົວພັນກັບທາດແທ້ຂອງສິ່ງວັດຖຸນັ້ນ, ຄວາມຂັດແຍ່ງອື່ນອື່ນ ແລະ ລັກສະນະຂະຫຍາຍຕົວຂອງສິ່ງວັດຖຸ ເອົາລວມລ້ວນແຕ່ຂຶ້ນກັບມັນ. ຄວາມຂັດແຍ່ງຕົ້ນຕໍມີຢູ່ໃນແຕ່ລະບອບເສດຖະກິດ-ສັງຄົມ, ແລະ ໃນແຕ່ ລະຍຸກສະໄໝ. ເຊັ່ນຕົວຢ່າງຄວາມຂັດແຍ່ງຕົ້ນຕໍຂອງທຶນນິຍົມ ແມ່ນຄວາມ ຂັດແຍ່ງລະຫວ່າງລັກສະນະສັງຄົມຂອງການຜະລິດ ກັບຮູບການຍຶດຖືກຳມະສິດເອກະເທດຂອງທຶນນິຍົມ. ມັນຕັດສິນຫຼາຍໆຄວາມຂັດແຍ່ງອື່ນໆ (ຄວາມ ຂັດແຍ່ງລະຫວ່າງຊົນຊັ້ນກຳມະຊີບກັບນາຍທຶນ, ລະຫວ່າງທົ່ວທັງປະຊາຊາດ ກັບ ກຸ່ມນາຍທຶນຜູກຂາດ, ລະຫວ່າງການຜະລິດ ແລະ ການຊົມໃຊ້ ແລະ ອື່ນ ໆ). ຊາຕາກຳຂອງທຶນນິຍົມ ຂຶ້ນກັບການຂະຫຍາຍຕົວ, ຄວາມຣ້າຍແຮງ, ແລະ ການແກ້ໄຂຄວາມຂັດແຍ່ງຕົ້ນຕໍດັ່ງກ່າວ.

ຄວາມຂັດແຍ່ງລະຫວ່າງສອງລະບົບແຫ່ງໂລກຄືສັງຄົມນິຍົມ ແລະ ທຶນນິ-ຍົມແມ່ນຄວາມຂັດແຍ່ງຕົ້ນຕໍຂອງຍຸກສະໄໝປະຈຸບັນ. ການຂະຫຍາຍຕົວຂອງມັນ ແລະ ການແກ້ໄຂຄວາມຂັດແຍ່ງດັ່ງກ່າວ ຕັດສິນການຂະຫຍາຍຕົວ ຂອງໂລກມະນຸດ, ລະບອບສັງຄົມນິຍົມແມ່ນຝ່າຍນຳໜ້າທີ່ພວມເຂັ້ມແຂງແຮງ ກ້າຢູ່ໃນຄວາມຂັດແຍ່ງນີ້ແລະ ໄຊຊະນະຂອງສັງຄົມນິຍົມ ແມ່ນສິ່ງຫລີກເວັ້ນບໍ່ໄດ້. ດ້ວຍເຫດນັ້ນ ຄວາມຂັດແຍ່ງຕົ້ນຕໍຂອງຍຸກສະໄໝປະຈຸບັນນີ້ ຈະຖືກ ແກ້ໄຂດ້ວຍໄຊຊະນະຂອງສັງຄົມນິຍົມ ແລະ ກອມມູນິດນິຍົມໃນທົ່ວໂລກ.

ຕາມລັກສະນະໃນຊີວິດຂອງສັງຄົມ ມີຄວາມຂັດແຍ່ງທີ່ປໍລະປັກກັນ ແລະບໍ່ປໍລະປັກກັນ. ລັກສະນະປໍລະປັກກັນຂອງບັນດາຄວາມຂັດແຍ່ງກຳນົດດ້ວຍການແບ່ງສັງຄົມອອກເປັນບັນດາຊົນຊັ້ນ ທີ່ມີຜົນປະໂຫຍດຂັດກັນ, ເຊິ່ງມີກຳມະສິດສ່ວນຕົວຕໍ່ພາຫະນະການຜະລິດເປັນພື້ນຖານ. ນັ້ນແມ່ນຄວາມຂັດແຍ່ງ ທີ່ຣ້າຍແຮງ ແລະ ມີລັກສະນະເປັນສັດຕູກັນ. ຄວາມຂັດແຍ່ງດັ່ງນີ້ແກ້ໄຂດ້ວຍ ເສັ້ນທາງການຕໍ່ສູ້ຊົນຊັ້ນ ແລະ ການປະຕິວັດທາງສັງຄົມ ທີ່ດັບສູນລະບອບສັງຄົມ-ແບບເກົ່າ ແລະ ສ້າງຕັ້ງລະບອບສັງຄົມໃໝ່ຂຶ້ນ. ຄວາມຂັດແຍ່ງດັ່ງນີ້ເປັນ-ລັກສະນະພິເສດສຳລັບສັງຄົມຂ້າທາດ, ສັກດິນາ ແລະ ນາຍທຶນ. ຄວາມຂັດແຍ່ງຕົ້ນຕໍຂອງທຶນນິຍົມ (ລະຫວ່າງແຮງງານ ແລະທຶນ) ນັ້ນມີລັກສະນະປໍລະ

ປັກກັນ. ໃນຂະນະທີ່ມັນຂະຫຍາຍຕົວກໍຈະນຳທຶນນິຍົມ ໄປເຖິງການ ພັງທະລາຍຢ່າງຫລີກເວັ້ນບໍ່ໄດ້. ທຸກຄວາມຂັດແຍ່ງຂອງທຶນນິຍົມນັບມື້ຮ້າຍແຮງແລະເລິກເຊິ່ງ, ມັນເປັນການຢັ້ງຢືນໃຫ້ເຫັນວ່າລະບົບທຶນນິຍົມ ເວົ້າລວມ ໄດ້ສຸກງອມສຳລັບການປະຕິວັດສັງຄົມນິຍົມແລ້ວ. ຄວາມຂັດແຍ່ງຕົ້ນຕໍຂອງຍຸກ ສະໄຫມປະຈຸບັນນີ້ຄືຄວາມຂັດແຍ່ງລະຫວ່າງສອງລະບອບສັງຄົມແຫ່ງໂລກຄື ສັງຄົມນິຍົມ ແລະ ທຶນນິຍົມ.

ໃນເມື່ອມີຈຸດລວມໃນຜົນປະໂຫຍດໃນດ້ານພື້ນຖານ ລະຫວ່າງບັນດາ ກຸ່ມຄົນຕ່າງໆໃນສັງຄົມແລ້ວກໍເກີດມີຄວາມຂັດແຍ່ງ ທີ່ບໍ່ປໍລະປັກກັນ. ຕົວຢ່າງໃນເງື່ອນ ໄຂທຶນນິຍົມ ຄວາມຂັດແຍ່ງລະຫວ່າງນາຍທຶນນ້ອຍ ແລະ ຊົນຊັ້ນ ກຳມະກອນບໍ່ແມ່ນຄວາມຂັດແຍ່ງປໍລະປັກກັນ. ນາຍທຶນນ້ອຍມີກຳມະສິດເອກະ - ເທດ (ຊາວນາມີທີ່ດິນ, ສັດ, ເຄື່ອງມື; ນາຍທຶນນ້ອຍໃນຕົວເມືອງ ມີໂຮງງານນ້ອຍ, ຮ້ານຄ້ານ້ອຍ ແລະ ອື່ນໆ). ນາຍທຶນນ້ອຍຢາກຮັກສາກຳມະສິດດັ່ງກ່າວ. ກຳມະກອນບໍ່ມີກຳມະສິດສ່ວນຕົວ ແລະ ມີຄວາມສົນໃຈຢາກດັບສູນກຳມະສິດສ່ວນຕົວທຸກປະເພດ ໃນຕອນສຸດທ້າຍ. ອັນນີ້ເອງເປັນຕົ້ນເຫດ ທີ່ພາໃຫ້ເກີດມີຄວາມຂັດແຍ່ງບາງປະການ ລະຫວ່າງຜົນປະໂຫຍດຂອງນາຍທຶນນ້ອຍ ແລະ ກຳມະກອນ. ແຕ່ຜົນປະໂຫຍດຂອງພວກເຂົາເຈົ້າໃນສິ່ງຕົ້ນຕໍນັ້ນຄືກັນ ເນື່ອງຈາກວ່າທັງນາຍທຶນນ້ອຍ ທັງກຳມະກອນ ລ້ວນແຕ່ຖືກນາຍທຶນຜູກຂາດກົດຂີ່ຂົ່ມເຫັງ ແລະ ທັງສອງລ້ວນແຕ່ຢາກດັບສູນການກົດຂີ່ຂົ່ມເຫັງ. ອັນນີ້ອຳນວຍໃຫ້ແກ່ຊົນຊັ້ນກຳມະກອນດູດດຶງເອົານາຍທຶນນ້ອຍເຂົ້າຂ້າງຕົນ ໃນການຕໍ່ສູ້ຕ້ານທຶນນິຍົມ. ຄວາມຂັດແຍ່ງລະຫວ່າງພວກເຂົາເຈົ້າ ຈະຖືກແກ້ໄຂໃນການກໍ່ສ້າງສັງຄົມ ສັງຄົມນິຍົມ.

ໃນສັງຄົມ ສັງຄົມນິຍົມ ທີ່ມີຄວາມເປັນເອກະພາບດ້ານສັງຄົມ- ການເມືອງ ແລະ ແນວຄິດລະຫວ່າງຊົນຊັ້ນໃນສັງຄົມ, ເຊິ່ງຄວາມເປັນເອກະ - ພາບນີ້ສ້າງຕັ້ງຂຶ້ນເທິງພື້ນຖານກຳມະສິດລວມໝູ່ນັ້ນກໍມີຄວາມຂັດແຍ່ງເຊັ່ນດຽວກັນ ແຕ່ມັນແມ່ນຄວາມຂັດແຍ່ງທີ່ມີລັກສະນະບໍ່ປໍລະປັກກັນ. ທຸກຊົນຊັ້ນ, ຊັ້ນຄົນ ແລະ ບຸກຄົນໃນສັງຄົມລ້ວນແຕ່ມີຜົນປະໂຫຍດທາງເສດຖະກິດ ອັນ ພື້ນຖານ ແລະ ຫລັກການຄຸນສົມບັດການເມືອງອັນດຽວກັນ. ປະຊາຊົນສ່ວນຫລວງຫລວງສະໜັບສະໜູນສິ່ງໃໝ່, ມຸ່ງໜ້າໄປສູ່ຈຸດປະສົງລວມອັນດຽວກັນ. ຖ້າ

ຫາກໃນເມື່ອກ່ອນຄວາມຂັດແຍ່ງໄດ້ສະແດງຕົວອອກ ແລະ ໄດ້ຮັບການແກ້ໄຂແບບຕາມມີຕາມເກີດແລ້ວ ສ່ວນພາຍໃຕ້ລະບອບສັງຄົມນິຍົມ ຂະບວນວິວັດດັ່ງກ່າວດຳເນີນໄປໂດຍຜ່ານການເຄື່ອນໄຫວຢ່າງມີຈິດສຳນຶກຂອງຄົນ ພາຍໃຕ້ການນຳພາຂອງພັກລັດທິມາກ ທີ່ວາງແນວທາງການເມືອງຂອງຕົນ ບົນ ພື້ນຖານກົດເກນຂະຫຍາຍຕົວຂອງສັງຄົມທີ່ໄດ້ຮັບຮູ້ມາແລ້ວ. ຄວາມຂັດແຍ່ງຂອງສັງຄົມນິຍົມ ສາມາດແກ້ໄຂໃຫ້ທັນເວລາໄດ້ໄວພໍສົມຄວນ ກ່ອນທີ່ຄວາມ ຂັດແຍ່ງດັ່ງກ່າວຈະ ກ້າວໄປເຖິງຂັ້ນຮ້າຍແຮງ. ການແກ້ໄຂຄວາມຂັດແຍ່ງດັ່ງກ່າວບໍ່ທວງໃຫ້ມີການປ່ຽນແປງພື້ນຖານຂອງລະບອບທີ່ຄົງຢູ່ ແຕ່ກົງກັນຂ້າມມັນເຮັດໃຫ້ລະບອບໝັ້ນຄົງຂຶ້ນ ອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍ ຕົວຂອງສັງຄົມ.

ໃນໄລຍະຂ້າມຜ່ານແຕ່ທຶນນິຍົມໄປສູ່ສັງຄົມນິຍົມຢູ່ໃນປະເທດ ບ່ອນທີ່ຊາວຜູ້ອອກແຮງງານໄດ້ຍຶດອຳນາດໄວ້ໃນກຳມືຂອງຕົນ ແລະ ໄດ້ໂຄ່ນລົ້ມພວກກົດຂີ່ຂູດຮີດແລ້ວ ແຕ່ຍັງບໍ່ທັນກໍ່ສ້າງສັງຄົມນິຍົມໃຫ້ສຳເລັດເທື່ອນັ້ນ ຍັງມີ ຄວາມຂັດແຍ່ງທັງສອງຊະນິດດັ່ງທີ່ກ່າວມາຂ້າງເທິງແລ້ວ. ອັນນີ້ແມ່ນຄວາມຂັດແຍ່ງທີ່ບໍ່ທັນໄດ້ແກ້ຕົກເທື່ອເຊັ່ນຄວາມຂັດແຍ່ງທີ່ບໍ່ປໍລະປັກກັນ ພາຍໃນບັນດາຊົນຊັ້ນຊາວຜູ້ອອກແຮງງານ, ນອກຈາກນັ້ນ ຍັງມີຄວາມຂັດແຍ່ງທີ່ປໍລະປັກກັນ ລະຫວ່າງຊາວຜູ້ອອກແຮງງານ (ຊົນຊັ້ນກຳມະກອນ, ຊາວນາ, ນາຍທຶນນ້ອຍ-ໃນຕົວເມືອງ) ແລະ ຊົນຊັ້ນກົດຂີ່ຂູດຮີດ (ນາຍທຶນ, ເຈົ້າທີ່ດິນ) ທີ່ຖືກໂຄ່ນລົ້ມລົງແລ້ວ ແຕ່ບໍ່ທັນຖືກລົບລ້າງເທື່ອ. ມີຄວາມຈຳເປັນບໍ່ພຽງແຕ່ຕ້ອງ ໄຈ້ແຍກຄວາມຂັດແຍ່ງປະເພດຕ່າງໆ ແຕ່ໃນພຶດຕິກຳຕົວຈິງ ຍັງຕ້ອງຄຳນຶງເຖິງວິທີການ ແລະ ຮູບແບບທີ່ແຕກຕ່າງກັນທີ່ສຸດ ໃນການແກ້ໄຂຄວາມຂັດແຍ່ງດັ່ງກ່າວ.

ດັ່ງນີ້ ກົດເກນວ່າດ້ວຍຄວາມເປັນເອກະພາບ ແລະ ການຕໍ່ສູ້ກັນ ລະຫວ່າງສິ່ງກົງກັນຂ້າມນັ້ນ ສະແດງເຖິງທາດແທ້ຂອງແຕ່ລະການເຄື່ອນ ເໜັງແລະການຂະຫຍາຍຕົວ ແລະ ຊີ້ແຈງໃຫ້ເຫັນວ່າ ມັນດຳເນີນໄປທ່າມ ກາງການກະທົບຈິ່ງກັນແລະກັນ ລະຫວ່າງສິ່ງກົງກັນຂ້າມ ຢູ່ພາຍໃນເຊິ່ງ ປະກອບເປັນດ້ານທີ່ຕັດຂາດອອກຈາກກັນບໍ່ໄດ້ຂອງແຕ່ລະປະກົດການ. ການກະທົບຈິ່ງກັນ ແລະ ກັນເຊັ່ນນີ້ ແມ່ນສາຍເຫດພາຍໃນແຫ່ງການຂະຫຍາຍຕົວຂອງທຸກໆ

ປະກົດການ ແລະ ຂະບວນວິວັດ.

ໃນເມື່ອຄົ້ນຄວ້າສິ່ງວັດຖຸ ແລະ ປະກົດການ, ຕ້ອງເລີ້ມຕົ້ນຈາກຄວາມ-ຂັດແຍ່ງຂອງມັນ ແລະຖືສິ່ງວັດຖຸ ແລະ ປະກົດການເປັນຄວາມເປັນເອກະ - ພາບຂອງດ້ານ, ລັກສະນະສະເພາະ ແລະ ທ່າອ່ຽງທີ່ກົງກັນຂ້າມກັນ ແລະ ໄດ້ແຍກສາຍພົວພັນກັນລະຫວ່າງມັນ. ເລນິນ ໄດ້ຂຽນວ່າ: "ການແບ່ງ ອອກເປັນສອງພາກຂອງສິ່ງທີ່ເປັນເອກະພາບກັນ ແລະ ການຮັບຮູ້ບັນດາພາກສ່ວນກົງກັນຂ້າມກັນຂອງມັນນັ້ນ...ແມ່ນທາດແທ້...ຂອງສັດຈະວິພາກ"[໑]. ໃນແຕ່ລະປະກົດການ ໃນແຕ່ລະສິ່ງວັດຖຸ ບໍ່ພຽງແຕ່ຕ້ອງແນມເຫັນພຽງແຕ່ສິ່ງ ດີຫລືສິ່ງບໍ່ດີເທົ່ານັ້ນ, ແນມເຫັນແຕ່ສິ່ງໃຫມ່ຫລືສິ່ງເກົ່າເທົ່ານັ້ນ, ແຕ່ຕ້ອງຊອກເຫັນຄວາມເປັນເອກະພາບ, ການກະທົບທີ່ກົງກັນຂ້າມກັນລະຫວ່າງພວກມັນ. ການຄົ້ນຄວ້າເບິ່ງສິ່ງວັດຖຸໃນທຳນອງນີ້ອຳນວຍໃຫ້ເຫັນທາດແທ້ຂອງມັນ.

ເພື່ອຄົ້ນຄວ້າບັນດາປະກົດການ ໃນການຂະຫຍາຍຕົວຂອງມັນ ດັ່ງທີ່ສັດ-ຈະວິພາກຮຽກຮ້ອງນັ້ນ ຕ້ອງຄົ້ນຄວ້າເບິ່ງປະກົດການດັ່ງກ່າວນີ້ ໃນແງ່ຄວາມເປັນເອກະພາບ ແລະ ການຕໍ່ສູ້ຂອງສິ່ງກົງກັນຂ້າມ ເຊິ່ງເປັນລັກສະນະສະເພາະຂອງມັນ. ວ.ອີ.ເລນິນໃຫ້ຂໍ້ສັງເກດວ່າ: "ເງື່ອນໄຂຂອງການຮັບ ຮູ້ທຸກໆຂະບວນວິວັດໃນໂລກນັ້ນ ນອນຢູ່ໃນການເຄື່ອນເຫນັງດ້ວຍຕົນເອງ" ຂອງມັນ, ໃນການຂະຫຍາຍຕົວແບບເກີດຂຶ້ນເອງ, ໃນການຄົງຕົວແບບມີຊີວິດ ຊີວາຂອງມັນ ນັ້ນແມ່ນການຮັບຮູ້ຂະບວນວິວັດໃນຖານະຄວາມເປັນເອກະພາບ-ລະຫວ່າງສິ່ງກົງກັນຂ້າມ. ການຂະຫຍາຍຕົວແມ່ນການຕໍ່ສູ້ ລະຫວ່າງສິ່ງ ກົງກັນຂ້າມ"[໒]. ການຄົ້ນພົບຄວາມຂັດແຍ່ງກັນພາຍໃນເປົ້າຫມາຍ ທີ່ຄົ້ນຄວ້ານັ້ນ ອຳນວຍໃຫ້ເຫັນກຳລັງແຮງຊຸກດັນ ແລະ ກົດເກນການຂະຫຍາຍຕົວຂອງມັນ, ອຳນວຍໃຫ້ເຂົ້າເຖິງທາດແທ້ອັນເລິກເຊິ່ງຂອງມັນ.

ຈະເບິ່ງຂ້າມຄວາມຂັດແຍ່ງນັ້ນບໍ່ໄດ້, ຄວນຄົ້ນພົບ ແລະ ແກ້ໄຂມັນ.ຕົວຢ່າງວ່າ ຄວາມຂັດແຍ່ງລະຫວ່າງຊົນຊັ້ນກຳມະກອນ ແລະ ນາຍທຶນທີ່ມີຢູ່ ໃນສັງຄົມທຶນນິຍົມນັ້ນ ບໍ່ຄວນເຊື່ອງຊ້ອນ ແລະ ປິດບັງມັນ ດັ່ງທີ່ນັກແນວຄິດນາຍ

---

໑) ວ.ອີ.ເລນິນ ປະມວນບົດນິພົນຄົບຊຸດ, ເຫລັ້ມທີ ໒໙, ຫນ້າ ໓໑໖.

໒) ວ.ອີ.ເລນິນ ປະມວນບົດນິພົນຄົບຊຸດ, ເຫລັ້ມທີ ໒໙, ຫນ້າ ໓໑໗.

ທຶນ ແລະ ພວກລັດທິແກ້ໄດ້ພະຍາຍາມເຮັດມາແລ້ວ, ແຕ່ຄວນເພີຍແບມັນ , ຄວນເສີມຂະຫຍາຍການຕໍ່ສູ້ຊົນຊັ້ນ.

ບໍ່ຄວນເມີນເສີຍຕໍ່ຄວາມຂັດແຍ່ງທີ່ເກີດຂຶ້ນໃນລະຫວ່າງການກໍ່ສ້າງສັງຄົມນິຍົມ ແລະ ພາຍໃຕ້ລະບອບສັງຄົມນິຍົມ, ຕ້ອງຊອກມັນໃຫ້ເຫັນແລະແກ້ ໄຂມັນຢ່າງທັນການ ແລະ ຢ່າງກ້າຫານ, ບໍ່ປະປ່ອຍໃຫ້ມັນຮ້າຍແຮງຂຶ້ນ, ເພື່ອຈຸດປະສົງນີ້ ຕ້ອງຊ່າງຊອກຫາວິທີ ແລະ ພາຫະນະທີ່ເຫມາະສົມກວ່າຫມູ່ ສຳລັບເງື່ອນໄຂລະອຽດທີ່ກ່ຽວຂ້ອງເພື່ອແກ້ໄຂຄວາມຂັດແຍ່ງດັ່ງກ່າວໃຫ້ຕົກແຕກ.

## ໔. ການຂ້າມຜ່ານແຕ່ການປ່ຽນແປງດ້ານປະລິມານໄປສູ່ ການປ່ຽນແປງ ດ້ານຄຸນນະພາບ

ກົດເກນຂ້າມຜ່ານແຕ່ການປ່ຽນແປງດ້ານປະລິມານໄປສູ່ການປ່ຽນ ແປງດ້ານຄຸນນະພາບ ຊີ້ແຈງໃຫ້ເຫັນວ່າ ໃນຂະບວນວິວັດນັ້ນ ການຂ້າມຜ່ານ ແຕ່ຄຸນນະພາບຫນຶ່ງ ໄປສູ່ຄຸນນະພາບອື່ນນັ້ນ ດຳເນີນໄປແນວໃດ ແລະ ດ້ວຍວິທີໃດ ຫມາຍຄວາມວ່າສິ່ງໃຫມ່ເກີດຂຶ້ນມາທ່າມກາງການຂະຫຍາຍຕົວນັ້ນ ແນວໃດ. ເນື້ອໃນຂອງກົດເກນ ສະແດງອອກໂດຍຜ່ານມາດຕະເກນເຊັ່ນ ຄຸນນະພາບ, ປະລິມານ, ການວັດແທກ.

ທຸກໆສິ່ງວັດຖຸ ແລະ ຂະບວນວິວັດເປັນສິ່ງຫມັ້ນທ່ຽງ ແລະ ແນ່ນອນຢ່າງເດັດຖານ. ເວລາໃດມັນກໍ່ມີສິ່ງໃດຫນຶ່ງທີ່ພິເສດ ຊຶ່ງເປັນລັກສະນະສະເພາະສຳລັບມັນ ແລະ ດັ່ງນີ້ເອງ ມັນຈຶ່ງມີຄວາມແຕກຕ່າງກັນ. ທຳມະຊາດທີ່ມີ ຊີວິດແຕກຕ່າງກັນກັບ ທຳມະຊາດທີ່ບໍ່ມີຊີວິດ, ສັດແລະພືດພັນປະເພດຕ່າງໆ ກໍ່ແຕກຕ່າງກັນ. ພ້ອມກັນນັ້ນທຸກສິ່ງວັດຖຸຄ້າຍຄືກັນໃນດ້ານໃດດ້ານຫນຶ່ງ, ມີສິ່ງໃດຫນຶ່ງທີ່ເປັນອັນດຽວກັນ. ທັງທຳມະຊາດທີ່ມີຊີວິດ ແລະ ທີ່ບໍ່ມີຊີວິດລ້ວນແຕ່ແມ່ນວັດຖຸ, ທຸກໆປະເພດຂອງສັດ ແລະ ພືດພັນ ລ້ວນແຕ່ມີ ລັກສະນະຄືດຽວກັນ ຄືການມີຊີວິດ.

ຄວາມແຕກຕ່າງກັນ ແລະ ຄວາມຄ້າຍຄືກັນຂອງສິ່ງວັດຖຸນັ້ນສະແດງອອກໃນຄວາມຮັບຮູ້ກ່ຽວກັບຄຸນນະພາບ. ຄຸນນະພາບແມ່ນການທ້ອນໂຮມລັກສະນະ

ພິເສດທີ່ເປັນທາດແທ້, ທີ່ສະແດງເຖິງທຳມະຊາດ ແລະ ຈຸດພິເສດຂອງ ສິ່ງວັດຖຸ. ຄຸນນະພາບຊີ້ແຈງເຖິງລັກສະນະແນ່ນອນຂອງສິ່ງວັດຖຸ ແລະ ລັກ ສະນະຫມັ້ນທ່ຽງທຽບຖານຂອງມັນ ທີ່ພົວພັນຢ່າງບໍ່ຂາດສາຍ ກັບ ການຄົງ ຕົວຂອງມັນ. ການປ່ຽນແປງຄຸນນະພາບຂອງສິ່ງວັດຖຸ ແມ່ນການປ່ຽນແປງ ຂອງກະໂຕສິ່ງວັດຖຸເອງ. ເຊັ່ນ ການຢຸດຕິການແລກປ່ຽນທາດ ໃນຮາງກາຍແລວຫມາຍເຖິງຄວາມຕາຍ ແລະ ການພັງທະລາຍຂອງມັນ. ຄຳນິຍາມຄຸນ ນະພາບດັ່ງກ່າວ ຫມາຍເຖິງຄຸນນະພາບພື້ນຖານຂອງສິ່ງວັດຖຸ, ທີ່ເປັນລັກສະນະພິເສດທີ່ສັງລວມ ແລະ ຄົບຖ້ວນຂອງມັນ. ພ້ອມກັນນັ້ນ ແຕ່ລະສິ່ງວັດຖຸ ຍັງມີຄຸນນະພາບອື່ນ ທີ່ບໍ່ແມ່ນລັກສະນະພື້ນຖານອີກຫລາຍແນວ.

ການເຜີຍໃຫ້ເຫັນຄຸນນະພາບຂອງສິ່ງວັດຖຸນັ້ນ ແມ່ນຄວາມຈຳເປັນ ຂອງການຮັບຮູ້. ເພື່ອຮັບຮູ້ສິ່ງວັດຖຸ ຕ້ອງໃຈ້ແຍກມັນອອກຈາກສິ່ງວັດຖຸອື່ນເສຍກ່ອນແລ້ວກຳນົດຄວາມຄ້າຍຄືກັນ ແລະ ຄວາມແຕກຕ່າງກັນລະຫວ່າງສິ່ງວັດຖຸ ດັ່ງກ່າວ.

ການຄົ້ນພົບຄຸນນະພາບຂອງສິ່ງວັດຖຸ ໃນເວລາມີການກະທົບຊຶ່ງກັນ ແລະ ກັນ ລະຫວ່າງມັນກັບສິ່ງວັດຖຸອື່ນໆນັ້ນ ແມ່ນລັກສະນະສະເພາະຂອງມັນ. ສິ່ງວັດຖຸມີລັກສະນະສະເພາະຈຳນວນຫລວງຫລາຍ ເຊິ່ງແຕ່ລະ ລັກສະນະສະເພາະຕ່າງກໍສະແດງເຖິງຈຸດພິເສດຂອງສິ່ງວັດຖຸໃນດ້ານໃດດ້ານໜຶ່ງ. ການປ່ຽນແປງ ແລະ ການສູນຫາຍຂອງບາງລັກສະນະສະເພາະ ຈະບໍ່ນຳໄປເຖິງການປ່ຽນແປງຂອງສິ່ງວັດຖຸ. ຕົວຢ່າງຢາງຢືດສາມາດປ່ຽນສີ, ຮູບນອກ , ຄວາມຢືດຫົດ, ແຕ່ມັນຍັງຈະແມ່ນຢາງຢືດດັ່ງເດີມ. ຫາກແຕ່ ລັກສະນະສະເພາະ ແຕກຕ່າງກັນໃນດ້ານຄວາມຫມາຍ. ລັກສະນະສະເພາະພື້ນຖານ ທີ່ເປັນທາດແທ້ນັ້ນ ໃກ້ຄຽງກັບຄຸນນະພາບຂອງສິ່ງວັດຖຸ ແລະ ການປ່ຽນ ແປງຂອງມັນ ປ່ຽນແປງທັງວັດຖຸພ້ອມ. ເຊັ່ນຕົວຢ່າງ ສີຂອງນ້ຳມັນແອັດຊັງບໍ່ເປັນທາດແທ້ສຳລັບມັນ, ແຕ່ລັກສະນະສະເພາະຈູດໄຫມ້ ແມ່ນທາດແທ້. ສູນເສຍລັກສະນະຈູດໄຫມ້ແລ້ວ ມັນຈະບໍ່ແມ່ນເຊື້ອເພີງສຳລັບເຄື່ອງຈັກ.

ນອກຈາກຄຸນນະພາບແລ້ວ ແຕ່ລະສິ່ງວັດຖຸຍັງມີລັກສະນະແນ່ນອນດ້ານປະລິມານ. ເຊັ່ນ ຄົນມີອາຍຸທີ່ແນ່ນອນ, ເປັນຜູ້ສູງຫລືຕ່ຳ, ມີນ້ຳຫນັກເທົ່ານີ້ຫລືເທົ່ານັ້ນ ແລະ ອື່ນໆ. ທຸກສິ່ງເຫລົ່ານີ້ລ້ວນແຕ່ແມ່ນລັກສະນະພິເສດດ້ານປະລິ

ມານ ແມ່ນລັກສະນະແນ່ນອນ ທີ່ສະແດງເຖິງຂະໜາດ, ຈັງຫວະ ແລະ ລະດັບການຂະຫຍາຍຕົວຂອງຄຸນນະພາບໃດໜຶ່ງ. ຕາມທຳມະດາແລ້ວປະລິມານໝາຍເຖິງຕົວເລກ. ເພື່ອຄົ້ນຄວ້າມູນຄວາມຈິງ ຈຳເປັນຕ້ອງໄຈແຍກທັງ - ທາງດ້ານຄຸນນະພາບ ແລະ ທາງດ້ານປະລິມານ.

ຄຸນນະພາບ ແລະ ປະລິມານ ແມ່ນດ້ານທີ່ແຕກຕ່າງກັນຂອງສິ່ງວັດຖຸແລະຂະບວນວິວັດ ທີ່ຈຳເປັນສຳລັບການຕີລາຄາຢ່າງຄົບຖ້ວນ. ຈະຊີ້ແຈງພຽງແຕ່ຄຸນນະພາບ ຫລື ພຽງແຕ່ປະລິມານຂອງວັດຖຸນັ້ນບໍ່ພຽງພໍ. ຕ້ອງຊອກເຫັນ - ແລະ ຊີ້ແຈງທັງສອງດ້ານ. ຕົວຢ່າງ ໃນເມື່ອຕີລາຄາກຳລັງແຫງການ ຜະລິດ ຈະເວົ້າເຖິງແຕ່ຄຸນນະພາບສູງຂອງເຄື່ອງຈັກແລະກົນໄກເທົ່ານັ້ນບໍ່ພໍ, ຍັງຕ້ອງຮູ້ປະລິມານຂອງມັນ.

ນອນຢູ່ໃນຄວາມເປັນເອກະພາບກັນແລ້ວ ດ້ານປະລິມານ ແລະ ຄຸນ ນະພາບຂອງສິ່ງວັດຖຸ ພົວພັນເຊິ່ງກັນແລະກັນຢ່າງແໜ້ນແຟ້ນ ກຳນົດເງື່ອນ ໄຂຊຶ່ງກັນແລະກັນ. ປະລິມານຂຶ້ນກັບຄຸນນະພາບ ສ່ວນຄຸນນະພາບຂຶ້ນກັບປະລິ - ມານ. ການປ່ຽນແປງດ້ານປະລິມານອາດພາໄປເຖິງມີການປ່ຽນແປງດ້ານຄຸນນະພາບ. ແຕ່ບໍ່ແມ່ນການປ່ຽນແປງຂອງປະລິມານ ແຕ່ລະປະການທີ່ສາ ມາດນຳໄປເຖິງການປ່ຽນແປງດ້ານຄຸນນະພາບ ຫາກແມ່ນພຽງແຕ່ການປ່ຽນແປງທີ່ຢູ່ເໜືອຂອບເຂດການວັດແທກຂອງສິ່ງວັດຖຸ. ສ່ວນການປ່ຽນແປງດ້ານ ປະລິມານໃນຂອບເຂດການວັດແທກນັ້ນ ບໍ່ນຳໄປເຖິງການປ່ຽນແປງດ້ານຄຸນນະ - ພາບ. ການວັດແທກແມ່ນຂອບເຂດເຊິ່ງໃນນັ້ນ ການປ່ຽນແປງດ້ານປະລິມານບໍ່ນຳໄປເຖິງການດັດປ່ຽນດ້ານຄຸນນະພາບ. ເຊັ່ນ ການວັດແທກສະພາບເປັນທາດແຫລວຂອງນ້ຳ ແມ່ນອຸນຫະພູມແຕ່ ໐ ເຖິງ ໑໐໐ ອົງສາແຊນຊີອູສ(ໃນເງື່ອນໄຂຄວາມກົດດັນຂອງບັນຍາກາດທຳມະດາ). ນ້ຳໄດ້ປ່ຽນສະພາບຈາກທາດແຫລວ ມາເປັນອາຍ ໃນເມື່ອມີອຸນຫະພູມ ໑໐໐ ອົງສາ, ຫລື ມັນ ຈະກາຍເປັນທາດແຂງ (ກາຍເປັນນ້ຳກ້ອນ) ໃນເມື່ອອຸນຫະພູມເຖິງ ໐ ອົງສາ ການວັດແທກເວົ້າເຖິງຄວາມເປັນເອກະພາບກັນລະຫວ່າງປະລິມານ ແລະຄຸນນະພາບ, ເວົ້າເຖິງການທີ່ວ່າບໍ່ແມ່ນປະລິມານໃດ, ຫາກແມ່ນປະລິມານ ອັນແນ່ນອນເປັນສິ່ງສອດຄ່ອງກັບຄຸນນະພາບໃດໜຶ່ງ.

ໃນເມື່ອບໍ່ມີຄຸນນະພາບແລ້ວ, ຄຸນນະພາບເກົ່າຈະບໍ່ສອດຄ່ອງກັບ ປະລິ-

ມານໃໝ່, ລະຫວ່າງມັນຈະເກີດມີຄວາມຂັດແຍ່ງທີ່ຮ້າຍແຮງຂຶ້ນ ຊຶ່ງຈະແກ້-ໄຂໄດ້ກໍດ້ວຍ ການສ້າງຕັ້ງຄຸນນະພາບໃໝ່ ແລະ ການວັດແທກໃໝ່. ອັນນີ້ເອງຮຽກວ່າ ການຂ້າມຜ່ານແຕ່ການປ່ຽນແປງດ້ານປະລິມານ ໄປສູ່ການປ່ຽນແປງດ້ານຄຸນນະພາບ. ດັ່ງນີ້ ກົດເກນໄດ້ເວົ້າເຖິງບັນຫາທີ່ວ່າ ການດັດປ່ຽນດ້ານຄຸນນະພາບ ດຳເນີນໄປໄດ້ພຽງແຕ່ຜ່ານການປ່ຽນແປງດ້ານປະລິມານ - ເທົ່ານັ້ນ.

ກົດເກນຂ້າມຜ່ານແຕ່ປະລິມານໄປສູ່ຄຸນນະພາບນັ້ນ ມີລັກສະນະ ທົ່ວໄປ ເພາະວ່າມັນມີຜົນບັງຄັບໃຊ້ທັງໃນໂລກພາວະວິໄສ ທັງໃນການຮັບຮູ້ການປ່ຽນແປງດ້ານປະລິມານ ເຊິ່ງເປັນການປ່ຽນແປງນ້ອຍໃນເບື້ອງຕົ້ນນັ້ນ ພາຍຫລັງທີ່ໄດ້ທ້ອນໂຮມກັນເຂົ້າແລ້ວ ສາມາດນຳໄປເຖິງການປ່ຽນແປງດ້ານ ຄຸນນະພາບ, ນຳໄປເຖິງການກຳເນີດຊະນິດ ແລະ ປະເພດໃໝ່ຂຶ້ນ. ຄົນເຮົາໄດ້ຮຽນຮູ້ນຳໃຊ້ອັນນີ້ ເພື່ອໃຫ້ກຳເນີດພືດພັນກະສິກຳ ແລະ ພັນສັດແນວໃໝ່.

ການປ່ຽນແປງດ້ານປະລິມານນຳໄປເຖິງ ການເກີດມີຄຸນນະພາບໃໝ່ໃນທຸກຂົງເຂດຂອງຊີວິດສັງຄົມ. ການດັດສ້າງທີ່ໃຫຍ່ຫລວງທີ່ສຸດໃນຊີວິດສັງຄົມນັ້ນແມ່ນການປະຕິວັດສັງຄົມ ທີ່ໄດ້ປ່ຽນແປງລັກສະນະຂອງລະບອບສັງຄົມເຖິງກົກເຖິງຮາກ. ທຸກການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມ ໃນສັງຄົມທີ່ໄດ້ດຳເນີນມາກ່ອນແລ້ວ ລ້ວນແຕ່ແມ່ນການກະກຽມໃຫ້ແກ່ການປະຕິວັດດັ່ງກ່າວ. ເງື່ອນໄຂການກະກຽມໃຫ້ແກ່ ມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ປີ ໑໙໑໗ ນັ້ນ ແມ່ນການຂະຫຍາຍຕົວທຶນນິຍົມຢູ່ລັດເຊຍ, ການເຕີບໃຫຍ່ ຂະຫຍາຍຕົວຢ່າງວ່ອງໄວຂອງກຳລັງການຜະລິດ, ຄວາມສາມັກຄີແໜ້ນແຟ້ນ - ຂອງຊົນຊັ້ນກຳມາຊີບ, ການກຳເນີດຂອງພັກລັດທິມາກ-ເລນິນ ແລະ ຄວາມຮ້າຍແຮງຂອງຄວາມຂັດແຍ່ງຂອງທຶນນິຍົມ ເປັນເງື່ອນໄຂສຳລັບມະຫາ ປະຕິວັດສັງຄົມນິຍົມເດືອນຕຸລາ ປີ ໑໙໑໗. ມັນແມ່ນຈຸດເລີ່ມຕົ້ນແຫ່ງການ ຂ້າມຜ່ານອັນເປັນປະຫວັດສາດຂອງປະເທດໂຊວຽດ ແຕ່ ທຶນນິຍົມກ້າວຂຶ້ນສູ່ສັງຄົມນິຍົມ.

ການຂຶ້ນຕໍ່ກັນລະຫວ່າງການປ່ຽນແປງດ້ານປະລິມານ ແລະ ດ້ານຄຸນ ນະພາບນັ້ນ ມີລັກສະນະກະທົບຊຶ່ງກັນແລະກັນ. ໃນໂລກພາວະວິໄສ ບໍ່ພຽງແຕ່ມີການຂ້າມຜ່ານ ຈາກການປ່ຽນແປງດ້ານປະລິມານ ໄປສູ່ການປ່ຽນແປງ ດ້ານ

ຄຸນນະພາບເກົ່ານັ້ນ, ແຕ່ຍັງມີການຂ້າມຜ່ານຈາກການປ່ຽນແປງດ້ານຄຸນ ນະພາບ ໄປສູ່ການປ່ຽນແປງດ້ານປະລິມານອີກດ້ວຍ. ການຂ້າມຜ່ານຈາກຄຸນນະພາບໄປເຖິງປະລິມານນັ້ນຫມາຍເຖິງທຸກປະກົດການ ໃນເມື່ອໄດ້ມີຄຸນນະພາບໃຫມ່ແລ້ວ ໄດ້ຮັບລັກສະນະໃຫມ່ດ້ານປະລິມານອີກດ້ວຍ. ເຊັ່ນ ເຂົ້າພັນໃຫມ່ໃນດ້ານຄຸນນະພາບ ມີລັກສະນະໃຫມ່ດ້ານປະລິມານ (ຜົນເກັບກ່ຽວສູງ ກວ່າ ແລະອື່ນໆ). ພັນສັດໃຫມ່ກໍໃຫ້ນ້ຳນົມ, ຊີ້ນ, ອົບ ແລະອື່ນໆຫລາຍກວ່າເກົ່າເຊັ່ນດຽວກັນ. ໃນຊີວິດສັງຄົມ ເສດຖະກິດລວມຫມູ່ ໃນການຜະລິດກະສິກຳມີສະມັດຖະພາບຂອງງານ ແລະ ຜະລິດຕະພົນສູງກວ່າ ຖ້າທຽບໃສ່ເສດຖະກິດເອກະເທດ. ທຸກສິ່ງເຫລົ່ານີ້ມີຄວາມຫມາຍດ້ານຕົວຈິງ. ຖ້າຫາກເສັ້ນ ທາງໄປເຖິງຄຸນນະພາບໃຫມ່ຕ້ອງຜ່ານເສັ້ນທາງການປ່ຽນແປງດ້ານຄຸນນະພາບ - ແລ້ວ ແມ່ນວ່າການບັນລຸປະລິມານໃຫມ່ນັ້ນ ມັກຈະປະຕິບັດໄດ້ບົນພື້ນຖານ ຄຸນນະພາບໃຫມ່ເລື່ອຍກວ່າ. ເຊັ່ນ ເພື່ອບັນລຸສະມັດຖະພາບຂອງງານສູງ ກວ່າເກົ່ານັ້ນ ຕ້ອງຫມູນໃຊ້ເຕັກນິກ ແລະ ວິທະຍາການໃຫມ່, ປັບປຸງການຈັດຕັ້ງການຜະລິດ, ຍົກສູງລະດັບຄວາມຊຳນິຊຳນານຂອງພະນັກງານ.

ຕາມທຳມະດາແລ້ວ ການປ່ຽນແປງດ້ານປະລິມານ ດຳເນີນໄປເທື່ອ ລະກ້າວຢ່າງນິ້ມນວນ, ມັກຈະເປັນການປ່ຽນແປງທີ່ບໍ່ສັງເກດເຫັນໄດ້. ການປ່ຽນແປງດ້ານຄຸນນະພາບເວລາໃດກໍ່ດຳເນີນໄປຢ່າງໄວກວ່າຫລາຍ ແລະ ຕ້ອງເປັນການປ່ຽນແປງແບບກ້າວກະໂດດ. ຄວາມຈຳເປັນຂອງການກ້າວກະໂດດໃນຂະບວນວິວັດນັ້ນ ກຳນົດດ້ວຍຄຸນນະພາບ ທີ່ໄດ້ສ້າງເຂດແດນລະຫວ່າງສິ່ງວັດຖຸ ຫລື ລະຫວ່າງໄລຍະການຂະຫຍາຍຕົວຂອງມັນ. ການກ້າວກະໂດດ - ຫມາຍເຖິງການຂ້າມຜ່ານເຂດແດນດັ່ງກ່າວ. ຍ້ອນມີການກ້າວກະໂດດ ການຂະຫຍາຍຕົວຈິ່ງເປັນແບບຂາດສາຍ. ການປ່ຽນແປງດ້ານປະລິມານສະ ແດງເຖິງລັກສະນະບໍ່ຂາດສາຍ ຂອງການຂະຫຍາຍຕົວ, ການກ້າວກະໂດດ ແມ່ນການພັກເຊົາຂອງລັກສະນະບໍ່ຂາດສາຍ ຂອງລັກສະນະກ້າວໄປຕາມລຳດັບ . ການຂະຫຍາຍຕົວແມ່ນຄວາມເປັນເອກະພາບລະຫວ່າງລັກສະນະບໍ່ຂາດສາຍ- ແລະ ລັກສະນະຂາດສາຍ.

ການກ້າວກະໂດດ ແມ່ນການປ່ຽນແປງດ້ານຄຸນນະພາບ, ແມ່ນການຂ້າມຜ່ານຂອງປະກົດການ ຈາກຄຸນນະພາບຫນຶ່ງ ໄປສູ່ຄຸນນະພາບອື່ນ. ຖ້າ ທຽບ

ໃສ່ ການປ່ຽນແປງດ້ານປະລິມານແລ້ວ ມັນກິນໄລຍະເວລາໜ້ອຍກວ່າ, ແຕ່ ໃນໄລຍະນັ້ນມີການດັດປ່ຽນປະກົດການດັ່ງກ່າວຢ່າງເລິກເຊິ່ງ.

ໃນເງື່ອນໄຂລະອຽດນັ້ນ ກົດເກນອ້າມຜ່ານ ແຕ່ປະລິມານໄປສູ່ຄຸນ ນະ ພາບ ສະແດງຕົວອອກຢ່າງແຕກຕ່າງກັນ. ດ້ວຍເຫດນັ້ນລັກສະນະ, ໄລຍະ- ແລະຄວາມສຳຄັນ ຂອງການກ້າວກະໂດດ ຈຶ່ງມີຫລາຍຮູບຫລາຍສີ. ມັນ ສາ ມາດເປັນການກ້າວກະໂດດທີ່ຂ້ຽວຂາດ ໃນເມື່ອການອ້າມຜ່ານຈາກຄຸນ ນະ ພາບເກົ່າ ຂຶ້ນສູ່ຄຸນນະພາບໃໝ່ດຳເນີນໄປບາດດຽວ, ທັງເປັນການກ້າວກະ ໂດດ ໄປຕາມລຳດັບ ໃນເມື່ອການອ້າມຜ່ານນັ້ນດຳເນີນຜ່ານຫລາຍຂັ້ນ ລະ ຫວ່າງກາງ, ຜ່ານຫລາຍຮູບແບບຂອງການອ້າມຜ່ານ. ເຊັ່ນ ກົ່ວ ແລະຂາງ ອ້າມຜ່ານຈາກສະພາບເປັນທາດແຂງ ໄປສູ່ທາດແຫລວ ແລະ ໃນທາງປີ້ນກັນ ການອ້າມຜ່ານດຳເນີນໄປບາດດຽວ ໂດຍບໍ່ຕ້ອງຜ່ານຂັ້ນລະຫວ່າງກາງ. ການ ປ່ຽນແປງຂອງ ແກ້ວ ແລະ ຂີ້ເຜິ້ງ ມີລັກສະນະຕ່າງ, ຄືລັກສະນະດຳ ເນີນ ໄປຕາມລຳດັບ. ໃນເມື່ອເປື່ອຍມັນອ່ອນລົງເທື່ອລະນ້ອຍ ຈົນເຖິງສະ ພາບ ເປັນທາດແຫລວ. ມັນແຂງຄືນຕາມລຳດັບ ໂດຍຜ່ານຫລາຍສະພາບການອ້າມ ຜ່ານເຊັ່ນດຽວກັນ.

ຕາມກົດແລ້ວ ໃນໄລຍະການປະຕິວັດສັງຄົມນິຍົມ, ການປ່ຽນອຳ ນາດ ການເມືອງດຳເນີນໄປຢ່າງໄວ. ສ່ວນການດັດສ້າງໃນຂົງເຂດເສດຖະກິດ - ແລະ ຊີວິດດ້ານຈິດໃຈ ຕາມທຳມະດາແລ້ວ ດຳເນີນໄປຢ່າງເປັນລຳດັບຫຼາຍ ກວ່າ ຫລື ໜ້ອຍກວ່າ.

ໃນປັດຈຸບັນ ການປ່ຽນແປງດ້ານປະລິມານຢ່າງເປັນລຳດັບ ຮຽກ ເປັນ ວິວັດທະນາການ. ແຕ່ຄວາມຮູ້ກ່ຽວກັບບັນຫານີ້ສາມາດໝູນໃຊ້ໃນຄວາມ - ໝາຍອື່ນ ທີ່ກວ້າງກວ່ານີ້. ເມື່ອນັ້ນມັນຈະສອດຄ່ອງກັບຄວາມຮູ້ກ່ຽວກັບການ ຂະຫຍາຍຕົວ.

ເມື່ອເວົ້າເຖິງການກ້າວກະໂດດຢູ່ໃນຊີວິດສັງຄົມແລ້ວ ແມ່ນນຳໃຊ້ຄວາມ ຮູ້ກ່ຽວກັບການປະຕິວັດ. ແຕ່ຄວນເຂົ້າໃຈວ່າ ບໍ່ແມ່ນຈະຖືວ່າການກ້າວ ກະ ໂດດແຕ່ລະປະການ ໃນການຂະຫຍາຍຕົວຂອງສັງຄົມນັ້ນ ລ້ວນແຕ່ແມ່ນ ການ ປະຕິວັດທັງສິ້ນ. ເພາະມັນສາມາດແຕກຕ່າງກັນໃນດ້ານຂະໜາດແລະຄວາມ ເລິກເຊິ່ງ. ການປະຕິວັດດ້ານສັງຄົມແມ່ນພຽງແຕ່ການກ້າວກະໂດດ ທີ່ແມ່ນ

ການດັດປ່ຽນທົ່ວທັງສັງຄົມຢ່າງເຖິງກົກເຖິງຮາກ, ແມ່ນການທັບມ້າງພື້ນຖານລະບອບສັງຄົມເກົ່າ ແລະ ຂ້າມຜ່ານໄປສູ່ລະບອບສັງຄົມໃໝ່ ທີ່ກ້າວໜ້າ - ກວ່າ. ມັນປະກອບເປັນການຂ້າມຜ່ານຈາກຮູບຖານສັງຄົມໜຶ່ງ ໄປສູ່ຮູບຖານສັງຄົມແບບໜຶ່ງອີກ. ການປະຕິວັດ (ແຕ່ບໍ່ແມ່ນການປະຕິວັດດ້ານສັງຄົມ)ຍັງແມ່ນການກ້າວກະໂດດທີ່ນຳໄປສູ່ການປ່ຽນແປງຢ່າງເຖິງກົກເຖິງຮາກໃນບາງດ້ານຂອງຊີວິດສັງຄົມ. ການປະຕິວັດວິທະຍາສາດເຕັກນິກ ສາມາດເປັນ ຕົວຢ່າງຂອງການກ້າວກະໂດດໃນທຳນອງນີ້.

ການຂະຫຍາຍຕົວບໍ່ສາມາດຈະເປັນພຽງແຕ່ການປ່ຽນແປງດ້ານຄຸນ ນະພາບ (ການກ້າວກະໂດດ) ຫລືເປັນພຽງແຕ່ ການປ່ຽນແປງດ້ານປະລິ ມານເທົ່ານັ້ນ. ໂດຍສອດຄ່ອງກັບສອງດ້ານຂອງປະກົດການ ແລະ ການປ່ຽນແປງສອງປະເພດນີ້ ແຕ່ລະການຂະຫຍາຍຕົວ ມີສອງດ້ານ ຄືການປ່ຽນແປງ ດ້ານປະລິມານ ແລະ ການດັດປ່ຽນດ້ານຄຸນນະພາບ ແລະ ແມ່ນຄວາມເປັນເອກະພາບຢ່າງຕັດຂາດຈາກກັນບໍ່ໄດ້. ໃນຊີວິດສັງຄົມ ວິວັດທະນາການສ້າງເງື່ອນໄຂ ແລະ ພາໃຫ້ເກີດມີການປະຕິວັດ ເຊິ່ງເປັນການສຳເລັດ ວິວັດທະນາ - ການໃນເບື້ອງຕົ້ນ. ພວກອະພິທຳ ມີທັດສະນະດ້ານດຽວຕໍ່ບັນດາປະກົດ ການດັ່ງກ່າວ. ພວກເຂົາຈຳນວນໜຶ່ງ ເຂົ້າໃຈການຂະຫຍາຍຕົວ ເປັນ ຄື ການເຄື່ອນເໜັງຕາມເສັ້ນຊື່ແບບນົມນອມ ໂດຍປາສະຈາກ ການກາວກະໂດດແລະ ການຢຸດເຊົາ. ອີກຈຳນວນໜຶ່ງ ຖືການຂະຫຍາຍຕົວເປັນການດັດປ່ຽນດ້ານຄຸນນະພາບແບບຮຸນແຮງ ໂດຍບໍ່ມີການກະກຽມ.

ທັດສະນະທີ່ໜຶ່ງ ໝາຍຄວາມວ່າ ລັດທິວັດທະນາການທຳມະດານັ້ນແມ່ນພື້ນຖານແບບວິທີຂອງລັດທິປະຕິຮູບ ແລະ ລັດທິແກ້ ອຽງຂວາ. ບັນດາ ຕົວແທນຂອງລັດທິດັ່ງກ່າວນີ້ ພະຍາຍາມພິສູດວ່າ ການຂ້າມຜ່ານຈາກທຶນນິຍົມຂຶ້ນສູ່ ສັງຄົມນິຍົມນັ້ນສາມາດດຳເນີນໄປດ້ວຍວິທີທາງປະຕິຮູບ, ດ້ວຍການ ປ່ຽນແປງເລັກໜ້ອຍ ທີ່ບໍ່ແຕະຕ້ອງເຖິງບັນດາພື້ນຖານອັນເລິກເຊິ່ງ ຂອງທຶນນິຍົມ ແລະ ປະຕິເສດຄວາມຈຳເປັນຕ້ອງມີການກ້າວກະໂດດແບບປະຕິວັດ ສຳລັບການຂ້າມຜ່ານດັ່ງກ່າວ. ດັ່ງນີ້ເອງພວກເຂົາຈຶ່ງປົກປັກຮັກສາທຶນນິຍົມ ເພາະການຂ້າມຜ່ານໄປສູ່ສັງຄົມນິຍົມ ໂດຍປະສະຈາກການປະຕິວັດສັງຄົມນັ້ນບໍ່ອາດຈະເປັນໄປໄດ້.

ທັດສະນະທີ່ສອງ, ໝາຍຄວາມວ່າການບໍ່ເຂົ້າໃຈຄວາມຈຳເປັນຂອງ ວິວັດທະນາການ ສຳລັບການກ້າວກະໂດດແບບປະຕິວັດ ນັ້ນແມ່ນລັກສະນະ ສະເພາະຂອງພວກລັດທິສວຍໂອກາດອຽງ "ຊ້າຍ" ຂອງກຸ່ມຫົວຮຸນແຮງຕ່າງໆ. ພວກເຂົາເຈົ້າຮັບຮູ້ແຕ່ການຂະຫຍາຍຕົວແບບກ້າວກະໂດດ ທີ່ບໍ່ໄດ້ຮັບການກະກຽມ ຈາກການປ່ຽນແປງແຕ່ລະກ້າວ ທີ່ເກີດຂຶ້ນກ່ອນໜ້ານັ້ນ.

ໃນຂະບວນວິວັດການກໍ່ສ້າງສັງຄົມນິຍົມ ແລະ ພາຍໃຕ້ລະບອບສັງຄົມ ນິຍົມ ການດັດປ່ຽນທາງດ້ານຄຸນນະພາບມີລັກສະນະພິເສດ. ການກ້າວກະໂດດຈະເຊົາເປັນການປະຕິວັດດ້ານສັງຄົມ ແລະ ການເມືອງ, ມັນເປັນບາດກ້າວຂອງການຂະຫຍາຍຕົວແບບຄືບໄປທາງໜ້າ ແລະ ມີລັກສະນະກ້າວໜ້າທີ່ພົວພັນກັນກັບການເຕີບໃຫຍ່ດ້ານເສດຖະກິດຂອງປະເທດ, ດ້ານຄວາມສົມບູນພູນສຸກ ແລະ ວັດທະນະທຳຂອງປະຊາຊົນ. ຕາມລັກສະນະແລ້ວມັນແມ່ນການກ້າວກະໂດດແບບພາວະວິໄສ; ທີ່ໄດ້ກະກຽມແລະດຳເນີນໄປຢ່າງມີຈິດສຳນຶກ . ການດັດປ່ຽນທີ່ໃຫຍ່ຫລວງທາງດ້ານຄຸນນະພາບດຳເນີນໄປເປັນກ້າວໆຢ່າງສະໝ່ຳສະເໝີ ແລະ ໃນເວລາດຽວກັນ ໃນຈັງຫວະຄວາມໄວສູງ ໃນໄລ ຍະປະຫວັດສາດອັນສັ້ນ. ການກ້າວກະໂດດທີ່ໃຫຍ່ຫລວງ ໃນການກໍ່ສ້າງສັງຄົມນິຍົມຢູ່ ສ.ສ.ສ.ຊ. ນັ້ນ ຄືການຫັນເປັນອຸດສາຫະກຳໜັກໃນປະເທດ ແລະ ການຫັນເປັນກະສິກຳລວມໝູ່. ການຂ້າມຜ່ານແຕ່ສັງຄົມນິຍົມ ໄປສູ່ກອມມູນິດນິຍົມ ແມ່ນການກ້າວກະໂດດອັນໃຫຍ່ຫລວງ. ກອມມູນິດນິຍົມແມ່ນການ ສືບທອດໂດຍກົງຈາກສັງຄົມນິຍົມ ດ້ວຍເຫດນັ້ນການຂ້າມຜ່ານກ້າວຂຶ້ນກອມມູນິດນິຍົມ ຈຶ່ງດຳເນີນໄປດ້ວຍວິທີທາງເສີມຂະຫຍາຍປັບປຸງບັນດາພື້ນຖານສັງຄົມ ນິຍົມ ຫາກບໍ່ແມ່ນດ້ວຍວິທີທາງທັບມ້າງທຳລາຍ.

ໃນຕອນທ້າຍສາມາດເວົ້າໄດ້ວ່າ ກົດເກນຂ້າມຜ່ານແຕ່ການປ່ຽນແປງ - ດ້ານປະລິມານ ໄປສູ່ການປ່ຽນແປງດ້ານຄຸນນະພາບນັ້ນ ສ່ອງແສງໃຫ້ເຫັນໄລຍະຂະຫຍາຍຕົວ ທີ່ເປັນຂອດສຳຄັນ ແລະ ເປັນບາດລ້ຽວ, ໄຈແຍກໜຶ່ງໃນບັນດາດ້ານທີ່ສຳຄັນຂອງຂະບວນການກຳເນີດສິ່ງໃໝ່.

ເນື່ອງຈາກວ່າ ຄຸນນະພາບ ແລະ ປະລິມານຂອງປະກົດການ ເປັນສິ່ງທີ່ເປັນເອກະພາບກັນ ລັກສະນະອັນສົມບູນຂອງປະກົດການ ສາມາດເປັນໄປໄດ້ ຖ້າຫາກວ່າຄຳນຶງເຖິງທັງສອງດ້ານດັ່ງກ່າວ ແລະ ຄວາມເປັນເອກະພາບ -

ຂອງມັນ. ໃນການຮັບຮູ້ຢ່າງມີວິທະຍາສາດ ຈຳເປັນຕ້ອງມີທັງການວິໄຈດ້ານ ຄຸນນະພາບ, ທັງການວິໄຈດ້ານປະລິມານ ຂອງຂະບວນວິວັດທີ່ຄືນຄ້າ.ການ ມີທັດສະນະແບບດ້ານດຽວນັ້ນ ແມ່ນບໍ່ຖືກຕ້ອງ.

ເພື່ອຕີລາຄາລັກສະນະຂອງຂະບວນການຂະຫຍາຍຕົວ ຕ້ອງຄຳນຶງ ເຖິງ ການປ່ຽນແປງດ້ານປະລິມານ, ກໍຄືດ້ານຄຸນນະພາບ. ທັດສະນະດ້ານດຽວ ມີ ລັກສະນະອະພິທຳ. ໃນການເນື່ອງທັດສະນະແບບນັ້ນນຳໄປເຖິງລັດທິສວຍ ໂອ ກາດ ອຽງຂວາ ຫລື ອຽງຊ້າຍ.

## ພ. ການປະຕິເສດແຫ່ງຄວາມປະຕິເສດ

ກົດເກນປະຕິເສດແຫ່ງຄວາມປະຕິເສດ ສະແດງເຖິງລັກສະນະຕົ້ນຕໍຂອງ ການຂະຫຍາຍຕົວ ທີ່ສອງກົດເກນທຳອິດບໍ່ໄດ້ກວມລວມເອົາ. ກົດເກນ ດັ່ງ ກ່າວຊີ້ແຈງໃຫ້ເຫັນສາຍພົວພັນກັນລະຫວ່າງໄລຍະຂອງການຂະຫຍາຍຕົວ ທີ່ຕໍ່ ເນື່ອງກັນ ລະຫວ່າງສິ່ງເກົ່າ ແລະ ສິ່ງໃໝ່ ແລະໃຫ້ຄຳຕອບຕໍ່ຄຳຖາມກ່ຽວ ກັບວ່າ ທາງອຽງລວມຂອງການຂະຫຍາຍຕົວ ແລະ ຜົນຂອງມັນນັ້ນເປັນ ແນວ ໃດ.

ເພື່ອເຂົ້າໃຈທາດແທ້ຂອງກົດເກນດັ່ງກ່າວ ຕ້ອງຮູ້ຈັກວ່າ ການປະຕິເສດ ແບບສັດຈະວິພາກແມ່ນຫຍັງ ? ມັນແມ່ນການປ່ຽນແປງສິ່ງເກົ່າ ດ້ວຍ ອັນ ໃໝ່, ການຂ້າມຜ່ານຈາກອັນນີ້ໄປສູ່ອັນນັ້ນ ຂອງການຂະຫຍາຍຕົວ.ຂະບວນ ວິວັດຂ້າມຜ່ານຈາກອັນເກົ່າໄປສູ່ອັນໃໝ່, ການປ່ຽນແທນສິ່ງນີ້ດ້ວຍສິ່ງນັ້ນໃນ ປັດຊະຍາ ຮຽກເປັນການປະຕິເສດ.

ຈຸດພິເສດເປັນລັກສະນະສະເພາະ ຂອງການປະຕິເສດແບບສັດຈະວິພາກ ນັ້ນມີຫຍັງແດ່ ?

ການປະຕິເສດມີລັກສະນະລວມທົ່ວໄປ ແລະ ຈຳເປັນ, ມັນເປັນລັກ ສະ ນະພິເສດຂອງທຸກໆການຂະຫຍາຍຕົວ, ແມ່ນປັດໄຈທີ່ຂາດບໍ່ໄດ້ຂອງການ ຂະ ຫຍາຍຕົວ. ເຊື້ອພັນຈຳນວນໜຶ່ງຖືກປະຕິເສດຈາກພວກອື່ນໆ ທີ່ເປັນປະເພດ ໃໝ່ ທີ່ເກີດຂຶ້ນມາບົນພື້ນຖານປະເພດເກົ່າ ແລະ ແມ່ນປະເພດທີ່ສືບຕໍ່ຊີວິດ

ຢູ່ໄດ້. ການຂະຫຍາຍຕົວທາງປະຫວັດສາດຂອງສັງຄົມ ແມ່ນການປ່ຽນ ແທນລະບອບສັງຄົມໜຶ່ງ ດ້ວຍລະບອບສັງຄົມອີກແບບໜຶ່ງ. ໃນການຮັບຮູ້ ຫລັກ ແລະ ທິດສະດີຂອງວິທະຍາສາດຈຳນວນໜຶ່ງ ປ່ຽນແທນດ້ວຍອີກຈຳນວນໜຶ່ງ ທີ່ສ່ອງແສງມູນຄວາມຈິງຢ່າງຊັດເຈນກວ່າ. "ຖ້າບໍ່ປະຕິເສດຮູບແບບຄົງຢູ່ແບບເກົ່າແລ້ວ, ບໍ່ວ່າຈະຢູ່ໃນຂົງເຂດໃດ ການຂະຫຍາຍຕົວກໍບໍ່ອາດຈະດຳ ເນີນໄປໄດ້ " ໑).

ການປະຕິເສດດຳເນີນໄປຍ້ອນຄວາມຂັດແຍ່ງພາຍໃນ, ເຊິ່ງເປັນລັກສະນະປະຈຳ ຂອງບັນດາສິ່ງວັດຖຸ ແລະ ປະກົດການ ນັ້ນແມ່ນການແກ້ໄຂຄວາມຂັດແຍ່ງດັ່ງກ່າວ. ປະຕິເສດຢູ່ພາຍໃນແມ່ນລັກສະນະປະຈຳຂອງແຕ່ລະ ຂະບວນວິວັດທີ່ພວມຂະຫຍາຍຕົວ, ແຕ່ຫາກບໍ່ແມ່ນອັນອື່ນໄກ ທີ່ນຳມາແຕ່ ພາຍນອກ. ໃນທາດແທ້ແລ້ວ ມັນແມ່ນການປະຕິເສດດ້ວຍຕົນເອງ, ເນື່ອງຈາກ-ວ່າມັນດຳເນີນໄປຍ້ອນມີກົດເກນພາຍໃນ ແລະຄວາມຂັດແຍ່ງ ຂອງຂະ ບວນວິວັດດັ່ງກ່າວ. ໃນຊີວິດ ພວກເຮົາເຄີຍພົບພໍ້ກັບຮູບແບບການປະຕິເສດ ແບບຕ່າງໆ. ຕົວຢ່າງຄື ແນວປູກຂອງພືດພັນໃດໜຶ່ງ ສາມາດຖືກນົກກິນ ຫລື ຖືກບົດເປັນແປ້ງ. ກໍລະນີນີ້ ສິ່ງວັດຖຸທີ່ຖືກດັບສູນ ຍ້ອນມີການກະທົບຈາກກຳລັງ-ພາຍນອກ ແລະ ການຂະຫຍາຍຕົວຂອງມັນກໍ່ຢຸດຕິລົງ. ການປະຕິເສດ ແບບກົນຈັກເຊັ່ນນີ້ ແມ່ນການປະຕິເສດພາຍນອກ ທີ່ບໍ່ເກີດມາຈາກກົດເກນພາຍໃນຂອງສິ່ງວັດຖຸນີ້.

ການປະຕິເສດແບບສັດຈະວິພາກບໍ່ພຽງແຕ່ ບໍ່ຢຸດຕິການຂະຫຍາຍຕົວ, ແຕ່ກົງກັນຂ້າມ ຍັງແມ່ນເງື່ອນໄຂຂອງມັນອີກພ້ອມ. ແນວປູກໃນເມື່ອຕົກເຂົ້າໃນດິນປູກຝັງ ໃນເງື່ອນໄຂມີຄວາມອົບອຸ່ນ ແລະ ຄວາມຊຸ່ມຊື່ນແລ້ວຈະເກີດໜໍ່ຈໍ ແໜງ, ຈາກນັ້ນແນວປູກຈະຂະຫຍາຍຕົວເປັນພືດພັນ, ເຊິ່ງແມ່ນການ ປະຕິເສດແນວປູກ. ການປະຕິເສດດັ່ງນີ້ແມ່ນໄລຍະທີ່ຈຳເປັນຂອງການຂະ ຫຍາຍຕົວ, ທີ່ເກີດມາຈາກທຳມະຊາດ ຂອງຂະບວນວິວັດດັ່ງກ່າວ. ທຳນອງນີ້ເອງ ການປະຕິເສດທຶນນິຍົມ ດ້ວຍສັງຄົມນິຍົມນັ້ນ ຈິ່ງຫລີກເວັ້ນບໍ່ໄດ້ ຍ້ອນກົດເກນຂອງກະໂຕທຶນນິຍົມເອງ.

---

໑) ກ.ມາກ ແລະ ຝ.ອັງແກນ ປະມວນບົດນິພົນເຫລັ້ມ ໔, ໜ້າ ໔໓໗.

ຖ້າຫາກອະພິທຳເຂົ້າໃຈວ່າແຕ່ລະການປະຕິເສດ ຄືການປະຕິເສດ ພາຍນອກແບບກົນຈັກແລ້ວ ແມ່ນວ່າສັດຈະວິພາກຖືວ່າ ການປະຕິເສດແມ່ນ ໄລຍະຂອງການພົວພັນກັນ, ແມ່ນໄລຍະຂອງການຂະຫຍາຍຕົວ, ແມ່ນການລົບລ້າງອັນເກົ່າ ແລະ ພ້ອມກັນນັ້ນສ້າງຕັ້ງອັນໃຫມ່ຂຶ້ນ. ສິ່ງເກົ່າສ້າງເງື່ອນໄຂແລະກະກຽມໃຫ້ແກ່ສິ່ງໃຫມ່, ທີ່ກຳເນີດຢູ່ໃນທ້ອງຂອງມັນ ແລະ ແມ່ນຜູ້ສືບທອດມັນ ດ້ວຍເຫດນັ້ນ ໃນເມື່ອມີການປະຕິເສດບໍ່ແມ່ນຈະເກີດມີອັນໃຫມ່ໄດ້ ຕາມລຳພັງ, ແຕ່ຫາກເກີດມີພຽງແຕ່ອັນໃຫມ່ທີ່ແມ່ນຫມາກຜົນທີ່ຈຳເປັນຂອງ ອັນເກົ່າ. ແນວປູກສ້າງເງື່ອນໄຂ ໃຫ້ແກ່ການກຳເນີດຂອງພືດພັນ, ສ່ວນທຶນ ນິຍົມ ສ້າງເງື່ອນໄຂໃຫ້ແກ່ການປະກົດຕົວ ຂອງສັງຄົມນິຍົມ.

ສິ່ງໃຫມ່ບໍ່ແມ່ນຈະປະຖິ້ມສິ່ງເກົ່າແບບງ່າຍດາຍ ແລະ ບໍ່ມີເວລາ ໃດຈະດັບສູນມັນຢ່າງຮາບຄາບຈັກເທື່ອ. ການປະຕິເສດແບບສັດຈະວິພາກ ຮັກ ສາລັກສະນະສະເພາະກ້າວຫນ້າຂອງສິ່ງເກົ່າ. ຈຳເປັນຕ້ອງມີການປະຕິເສດສິ່ງທີ່ເກົ່າແກ່ຫລ້າຫລັງນັ້ນ ກໍ່ເພື່ອຮັກສາສິ່ງທີ່ກ້າວຫນ້າແລະສົມບູນ ແລະ ສ້າງເງື່ອນໄຂສຳລັບການຂະຫຍາຍຕົວຕໍ່ໄປຂອງມັນ. ຫລັງຈາກການລົບລ້າງການພົວພັນແຫ່ງການຜະລິດ ແບບທຶນນິຍົມແລ້ວ ການປະຕິວັດສັງຄົມນິຍົມຮັກສາກຳລັງແຫ່ງການຜະລິດ, ປ່ຽນລະບອບສັງຄົມ, ຮັກສາທຸກສິ່ງທີ່ມີຄ່າ ດ້ານວັດທະນະທຳແລະວິທະຍາສາດ.

ໃນຕົວຈິງແລ້ວບໍ່ແມ່ນປະຕິເສດທຸກສິ່ງທັງຫົດ _ໃນອັນໃຫມ່ບໍ່ພຽງແຕ່ ຮັກສາສິ່ງທີ່ກ້າວຫນ້າເທົ່ານັ້ນ ອາດສາມາດມີເສດເຫລືອທີ່ຫລ້າຫລັງຂອງສິ່ງເກົ່າປົນເປເຂົ້າມານຳກໍ່ໄດ້. ຕົວຢ່າງຄື ເສດເຫລືອຂອງທຶນນິຍົມໃນເສດຖະກິດແລະໃນແນວຄິດຂອງຄົນບາງພາກສ່ວນ ໃນສັງຄົມນິຍົມ. ມັນຈະຖືກລົບລ້າງໄປແຕ່ລະກ້າວໃນພາຍຫລັງ.

ການຮັກສາປັດໃຈກ້າວຫນ່າ ທີ່ປະກົດຕົວອອກໃນການຂະຫຍາຍຕົວໄລຍະກ່ອນນັ້ນ ຫມາຍເຖິງລັກສະນະສືບທອດສາຍພົວພັນລະຫວ່າງສິ່ງໃຫມ່ ແລະສິ່ງເກົ່າ. ການຂະຫຍາຍຕົວແບບກ້າວຫນ້າບໍ່ອາດຈະເປັນໄປໄດ້ ໂດຍ ປາສະຈາກການລົບລ້າງສິ່ງທີ່ຫລ້າຫລັງ. ມັນຍັງບໍ່ອາດຈະເປັນໄປໄດ້ ໂດຍ ປາສະຈາກລັກສະນະສືບທອດ. ທົ່ວທັງປະຫວັດສາດຂອງໂລກມະນຸດ ໄດ້ຊີ້ແຈງ ໃຫ້ເຫັນວ່າ ທ່າມກາງການຂະຫຍາຍຕົວ ມັນໄດ້ຮັກສາ ແລະ ສະສົມຫມາກ ຜົນ

ຂອງການອອກແຮງງານ ແລະຄວາມຄິດຂອງຄົນນັ້ນແນວໃດ. ໃນນີ້ແຕ່ລະໄລຍະຂອງການຂະຫຍາຍຕົວນັບມື້ອຸດົມຮັ່ງມີ ແລະ ມີເນື້ອໃນກວ່າເກົ່າ. ຖ້າວ່າຄົນຮຸ່ນໃໝ່ແຕ່ລະຮຸ່ນຫາກເລີ່ມຕົ້ນໃໝ່ແຕ່ຈຸດສູນ ແລ້ວ ຄວາມກ້າວໜ້າທາງສັງຄົມກໍບໍ່ອາດຈະເປັນໄປໄດ້.

ດັ່ງນີ້ການປະຕິເສດແບບສັດຈະວິພາກ ລວມເອົາທັງການລົບລ້າງສິ່ງ ທີ່ຫລ້າຫລັງເປັນຕົ້ນຕໍ ທັງການຮັກສາລັກສະນະກ້າວໜ້າຂອງອັນເກົ່າອີກພ້ອມ. ເພາະສະນັ້ນມັນຈຶ່ງສະແດງຕົວເປັນເງື່ອນໄຂຂອງຄວາມກ້າວໜ້າ. ດ້ວຍ - ເຫດນັ້ນ ທັດສະນະຂອງນັກແນວຄິດນາຍທຶນ ແລະ ພວກລັດທິແກ້ ທີ່ກ່າວຕ້ານຄວາມຈຳເປັນຂອງການດັດສ້າງແບບສັງຄົມນິຍົມ ຈຶ່ງແມ່ນຄວາມຜິດພາດດ້ານທິດສະດີ ແລະ ມີລັກສະນະປະຕິການດ້ານການເມືອງ. ໂດຍອ້າງອີງວ່າ ສິ່ງໃໝ່ ເກີດຂຶ້ນໃນທ້ອງສິ່ງເກົ່າແລ້ວ ພວກເຂົາເຈົ້າປະຕິເສດເງື່ອນໄຂ ທີ່ວ່າການສ້າງຕັ້ງລະບອບໃໝ່ສັງຄົມນິຍົມນັ້ນ ຮຽກຮ້ອງໃຫ້ຕ້ອງລົບລ້າງລະບອບ-ເກົ່າຄື ລະບອບທຶນນິຍົມ.

ຄວາມເຂົ້າໃຈແບບອະພິທຳ, ແບບອະນາທິປະໄຕ ແລະ ແບບອຽງຊ້າຍທີ່ຖືວ່າ ການປະຕິວັດ ເປັນການປະຕິເສດຢ່າງຮາບກ້ຽງ ແລະ ເດັດຖານ - ໂດຍປາສະຈາກລັກສະນະສືບທອດນັ້ນ ກໍຜິດພາດເຊັ່ນດຽວກັນ. ວ.ອີ.ເລນິນກ່າວຕ້ານພວກອະນາທິປະໄຕ ທີ່ສະໜັບສະໜູນການດັບສູນທຸກຮູບການຈັດຕັ້ງລັດໃນທັນໃດ ຫລັງຈາກທີ່ຊຸມຊົນກຳມະກອນຍາດເອົາອຳນາດມາໄດ້,ທ່ານຕຳໜິຢ່າງເຄັ່ງຂຶມພວກທີ່ຫວງໃຫ້ລົບລ້າງວັດທະນະທຳເກົ່າໃຫ້ໝົດກ້ຽງ. ທ່ານອະທິບາຍວ່າ ວັດທະນະທຳກຳມາຊີບ ຈະແຕກຕ່າງກັບ ວັດທະນະທຳເກົ່າ - ທາງດ້ານຄູນນະພາບ ແລະ ແມ່ນການປະຕິເສດມັນກໍຕາມ, ແຕ່ມັນບໍ່ແມ່ນກຳເນີດຂຶ້ນຈາກຄວາມເປົ່າຫວ່າງ ແລະ ມັນຮັບເອົາສິ່ງຍອດຍິ່ງທີ່ໄດ້ສ້າງຂຶ້ນມາໃນການຂະຫຍາຍຕົວຂອງໂລກມະນຸດນັບເປັນຫລາຍສະຕະວັດມາແລ້ວ. ວ.ອີເລນິນ ໄດ້ຊີ້ແຈງວ່າ ລັດທິ ມາກ ຄືຕົວຢ່າງ ຂອງທ່າທີທີ່ຖືກຕ້ອງຕໍ່ຄວາມຮັ່ງມີດ້ານແນວຄິດຂອງອະດີດ.ເຖິງແມ່ນວ່າເດັດດຽວປະຕິເສດປັດຊະຍາ, ເສດຖະສາດການເມືອງ ແລະ ລັດທິສັງຄົມນິຍົມແບບໄຝ່ຝັນອັນດັ້ງເດີມກໍຕາມ,ແຕ່ໃນຂະນະດຽວກັນນັ້ນ ລັດທິມາກກໍຍັງຮັກສາທຸກແນວທີ່ເປັນວິທະຍາສາດ ຢ່າງແທ້ຈິງ ທີ່ມີຢູ່ໃນວິຊາດັ່ງກ່າວ. ໃນການກໍຕັ້ງ ໂລກະທັດແບບວັດຖຸນິຍົມສັດຈະ

ວິພາກ ກ.ມາກ ແລະ ຟ.ອັງແກນ ໄດ້ອີງໃສ່ພື້ນຖານອັນແໜ້ນແກ່ນ ຂອງຄວາມຮູ້ຂອງໂລກມະນຸດໃນສະໄຫມກ່ອນໆ. ໃນປະຈຸບັນນີ້ ພ.ກ.ສ.ຊ. ມີທ່າທີຕຳໜິວັດທະນະທຳນາຍທຶນເວົ້າລວມ, ແຕ່ຍັງອົບຮົມໃຫ້ຮັບເອົາ ແລະ ຫມູນໃຊ້ອັນທີ່ມີຄ່າ ທີ່ມີວິທະຍາສາດ ແລະ ເຕັກນິກນາຍທຶນ.

ພາຍຫລັງທີ່ສິ່ງເກົ່າຖືກປ່ຽນແທນດ້ວຍສິ່ງໃຫມ່ແລ້ວ ການປະຕິເສດຄັ້ງທຳອິດໄດ້ຜ່ານພົ້ນໄປ, ການຂະຫຍາຍຕົວບໍ່ໄດ້ຢຸດຕິລົງພຽງເທົ່ານີ້. ສິ່ງໃຫມ່ຂະຫຍາຍຕົວ, ກາຍເປັນສິ່ງທີ່ເກົ່າແກ່ ແລະ ກໍ່ຄືສິ່ງເກົ່າທົ່ວໄປ ໃນໄລຍະເວລາອັນແນ່ນອນຈະຖືກປ່ຽນແທນດ້ວຍສິ່ງໃຫມ່ ຫມາຍຄວາມວ່າ ເກີດມີການປະຕິເສດສິ່ງທີ່ກະໂຕມັນເອງກໍ່ແມ່ນການປະຕິເສດ. ດັ່ງນີ້ ກົດເກນຂະຫຍາຍຕົວຈຶ່ງແມ່ນການປະ ຕິເສດແຫ່ງຄວາມປະຕິເສດ ການປ່ຽນແທນອັນເກົ່າດ້ວຍອັນໃຫມ່ ແລະ ປ່ຽນແທນອັນໃຫມ່ນີ້ດ້ວຍອັນໃຫມ່ກວ່າອີກ. ເນື່ອງຈາກວ່າ ໃນການປະຕິເສດບໍ່ພຽງແຕ່ໄດ້ລົບລ້າງອັນຫລ້າຫລັງ ແຕ່ຍັງຮັກສາອັນທີ່ກ້າວຫນ້າອີກພ້ອມ ສະນັ້ນຈຶ່ງສະຫລຸບໄດ້ວ່າ ການຂະຫຍາຍຕົວມີລັກສະນະກ້າວໄປທາງຫນ້າ. ມັນບໍ່ຕ່າວຄືນແລະ ບໍ່ສາມາດເດີນໄປຕາມເສັ້ນທາງກົງກັນຂ້າມ.

ການປ່ຽນແທນຢ່າງເປັນ ລຳດັບລະບອບສັງຄົມປະຖົມບູຮານດ້ວຍລະບອບຂ້າທາດ, ລະບອບຂ້າທາດແທນດ້ວຍລະບອບສັກດີນາ, ລະບອບສັກດີນາແທນດ້ວຍລະບອບທຶນນິຍົມນັ້ນ ແມ່ນການເຄື່ອນເຫນັງຕາມເສັ້ນທາງ ກ້າວໄປທາງຫນ້າ ແລະ ແມ່ນການກ້າວຫນ້າ. ສະໄຫມປະຈຸບັນນີ້ ໃນໂລກພວມດຳເນີນ-ການປ່ຽນແທນລະບອບທຶນນິຍົມດ້ວຍລະບອບສັງຄົມທີ່ມີລະດັບສູງກວ່າຄື ດ້ວຍສັງຄົມນິຍົມ.

ການຂະຫຍາຍຕົວກ້າວໄປທາງຫນ້ານັ້ນ ບໍ່ແມ່ນການເຄື່ອນເຫນັງແບບງ່າຍດາຍຕາມເສັ້ນຊື່. ອັນນີ້ກໍເນື່ອງຈາກວ່າ ທ່າມກາງການຂະຫຍາຍຕົວ ເຊິ່ງເວົ້າລວມແລ້ວ ແມ່ນຂະບວນວິວັດແບບກ້າວໄປທາງຫນ້ານັ້ນ ມີບາງ ໄລຍະທີ່ລະອິດລະອ້ຽວ ແລະ ມີການຖອຍຫລັງຊົ່ວຄາວ. ຕາມທຳມະດາແລ້ວ ຍ້ອນວ່າມັນມີການຕອບຕ້ານຫລືມີໄຊຊະນະຊົ່ວຄາວຂອງສິ່ງເກົ່າ. ຕົວຢ່າງ ໃນນີ້ແມ່ນການປະລາໄຊຂອງການປະຕິວັດ ແລະ ໄຊຊະນະຂອງປະຕິການ, ໄຊຊະນະຂອງລັດທິຟາດຊິດໃນປະເທດໃດຫນຶ່ງ ແລະ ອື່ນໆ. ແຕ່ການຖອຍຫລັງດັ່ງກ່າວນີ້ເວລາໃດກໍ່ມີລັກສະນະພາກສ່ວນ ແລະ ຊົ່ວຄາວ ແລະ ການຂະຫຍາຍ

ຕົວເວົ້າລວມ ມີລັກສະນະກ້າວໜ້າ, ເພາະເຖິງວ່າສິ່ງເກົ່າຈະສາມາດທ່ວງດຶງການຂະຫຍາຍຕົວກໍຕາມ ແຕ່ບໍ່ສາມາດຈະຢຸດຕິການຂະຫຍາຍຕົວແລະປ່ຽນແປງລັກສະນະສະເພາະຂອງມັນ.

ໃນໄລຍະອັນແນ່ນອນຂອງການຂະຫຍາຍຕົວ ເພິ່ນສາມາດພົບເຫັນ ການຊ້ຳຮອຍ ລັກສະນະສະເພາະຂອງອັນເກົ່າ, ຂອງອັນດັ້ງເດີມ. ການຊ້ຳຮອຍແບບນີ້ ບໍ່ແມ່ນການກັບຕາວສູ່ອັນເກົ່າຢ່າງເຕັມສ່ວນ ເພາະວ່າມັນຊ້ຳຮອຍ - ພຽງແຕ່ບາງຈຸດພິເສດຂອງອັນເກົ່າ ແລະ ດຳເນີນໄປບົນພື້ນຖານອັນໃໝ່ , ໃນລະດັບການຂະຫຍາຍຕົວທີ່ສູງກວ່າ. ຈຸດພິເສດດັ່ງກ່າວຂອງການຂະຫຍາຍຕົວນີ້ ແມ່ນລັກສະນະສະເພາະຂອງທຳມະຊາດ, ສັງຄົມ, ການຮັບຮູ້ ແລະ ແມ່ນລັກສະນະລວມທົ່ວໄປ. ຖ້າຫາກສືບຕໍ່ຍົກ ຕົວຢ່າງແນວປູກຂອງພືດພັນອາຍຸໜຶ່ງປີນັ້ນ ພວກເຮົາຈະເຫັນວ່າ ການປະຕິເສດທີ່ໜຶ່ງ ຄືພືດພັນນັ້ນຖືກປະຕິເສດດ້ວຍຜົນລະປູກຊຸດໃໝ່ ເພາະພາຍຫລັງການເກັບກ່ຽວແລ້ວ ພືດພັນ ຈະຕາຍໄປ. ດັ່ງນີ້ ຫລັງຈາກການປະຕິເສດຄັ້ງທີສອງແລ້ວ ຈະມີການຟື້ນຄືນລັກສະນະສະເພາະຂອງອັນດັ້ງເດີມຂອງການຂະຫຍາຍຕົວ. ການປະຕິເສດແບບເຕັມສ່ວນນັ້ນ ແມ່ນການຂ້າມຜ່ານໄປສູ່ລັກສະນະກົງກັນຂ້າມ ແລະ ການຂ້າມຜ່ານດັ່ງນີ້ຄັ້ງທີສອງຈະນຳໄປເຖິງການກັບຕາວຄືນສູ່ສະພາບດັ້ງເດີມ. ແຕ່ການກັບຕາວນີ້ບໍ່ເຕັມສ່ວນ ເນື່ອງຈາກວ່າລະຫວ່າງໄລຍະຕ່າງໆມີການ ສືບທອດ, ການປະຕິເສດບໍ່ແມ່ນແບບເດັດຖານ ແລະ ມັນດຳເນີນໃນການ ຂະຫຍາຍຕົວຂັ້ນສູງກວ່າ. ມັນເປັນເຊັ່ນນີ້ແທ້: ຜົນເກັບກ່ຽວແນວປູກໃໝ່ ແຕກຕ່າງກັບແນວປູກເດີມນັ້ນໃນດ້ານປະລິມານ ແລະ ໃນດ້ານຄຸນນະພາບ ໃນລະດັບໃດໜຶ່ງ.

ສັງຄົມປະຖົມບູຮານທີ່ບໍ່ມີຊົນຊັ້ນ ໄດ້ຮັບການສ້າງຕັ້ງຂຶ້ນບົນກຳມະສິດລວມໝູ່ຕໍ່ພາຫະນະການຜະລິດ, ຫລັງຈາກນັ້ນ ການຂະຫຍາຍຕົວຂອງກຳລັງແຮງການຜະລິດໄດ້ນຳໄປເຖິງການປະຕິເສດກຳມະສິດລວມໝູ່, ນຳໄປເຖິງການປ່ຽນແທນມັນດ້ວຍກຳມະສິດເອກະເທດ ອັນທີ່ໄດ້ຄອບງຳຕະຫລອດ ໄລຍະ ມີຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ຄືລະບອບຂ້າທາດ, ສັກດີນາແລະທຶນນິຍົມ. ການຂະຫຍາຍຕົວຂອງກຳລັງແຮງການຜະລິດໃນຂັ້ນຕໍ່ໄປ ຕ້ອງ ກ້າວໄປເຖິງຮູບຖານຈັດຕັ້ງກອມມູນິດນິຍົມ ບ່ອນທີ່ກຳມະສິດລວມໝູ່ຖືກຈັດຕັ້ງ ຂຶ້ນ

ອີກເທື່ອໜຶ່ງ. ໃນນັ້ນກໍມີການຊ້ຳຮອຍລັກສະນະສະເພາະຂອງໄລຍະຂັ້ນອັນດັ້ງເດີມໃນລະດັບທີ່ສູງກວ່າເຊັ່ນດຽວກັນ. ດັ່ງນັ້ນ, ການຂະຫຍາຍຕົວບໍ່ແມ່ນພຽງແຕ່ການເຄື່ອນເໜັງໄປໜ້າຕາມເສັ້ນຊື່ແບບງ່າຍດາຍ ແລະບໍ່ແມ່ນ ການເຄື່ອນເໜັງຕາມວົງມົນທີ່ຊ້ຳຮອຍເກົ່າຢ່າງເຕັມສ່ວນ, ຫາກແມ່ນຄວາມເປັນເອກະພາບແບບສັດຈະວິພາກ ລະຫວ່າງການເຄື່ອນເໜັງແບບກ້າວໄປ ໜ້າ ແລະ ລັກສະນະຊ້ຳຮອຍແບບທຽບຖານ, ໃນນັ້ນການເຄື່ອນເໜັງແບບ ກ້າວໄປໜ້າ ມີບົດບາດນຳໜ້າ. ເສັ້ນກົ້ນຫອຍແມ່ນຕົວຢ່າງອັນຈະແຈ້ງຂອງການຂະຫຍາຍຕົວທີ່ປະສົມປະສານກັບທ່າອຽງດັ່ງກ່າວມາເທິງນີ້. ການເຄື່ອນ - ເໜັງຕາມແບບກົ້ນຫອຍສາມາດພົບເຫັນໄດ້ໃນທຸກໆຂົງເຂດຂອງໂລກພາວະວິໄສ ແລະ ການຮັບຮູ້.

ກົດເກນ ການປະຕິເສດແຫ່ງຄວາມປະຕິເສດລວມທົ່ວໄປ ມີຜົນ ບັງຄັບໃຊ້ໃນເງື່ອນໄຂສັງຄົມ ສັງຄົມນິຍົມເຊັ່ນດຽວກັນ. ການກໍ່ສ້າງສັງຄົມ ນິຍົມແມ່ນການສືບຕໍ່ຂອງການປະຕິວັດສັງຄົມນິຍົມ, ແມ່ນການສືບຕໍ່ຂອງການປະຕິ-ເສດທຶນນິຍົມຢ່າງສິ້ນເຊີງ ໂດຍສັງຄົມນິຍົມ. ໃນສັງຄົມສັງຄົມນິຍົມທີ່ໄດ້ ຮັບການກໍ່ສ້າງສຳເລັດແລ້ວນັ້ນເກີດມີໜ້າທີ່ໃໝ່ ແລະ ການປະຕິເສດກໍມີ ບາງຈຸດພິເສດໃໝ່. ການກໍ່ສ້າງກອມມູນິດນິຍົມ ກາຍເປັນໜ້າທີ່ຕົ້ນຕໍ ເຊິ່ງແມ່ນການປະຕິເສດສັງຄົມນິຍົມດ້ວຍກອມມູນິດນິຍົມ ໄປແຕ່ລະກ້າວ, ແຕ່ມັນບໍ່ແມ່ນການປະຕິວັດດ້ານສັງຄົມ-ການເມືອງ ເພາະສັງຄົມນິຍົມ ແລະ ກອມມູນິດນິ-ຍົມ ລ້ວນແຕ່ແມ່ນໄລຍະຂັ້ນຂອງຮູບຖານຈັດຕັ້ງກອມມູນິດນິຍົມອັນດຽວກັນ ທີ່ມີພື້ນຖານອັນດຽວກັນ ແລະ ແຕກຕ່າງກັນພຽງໃນດ້ານລະດັບຄວາມຈະເລີນ - ຂອງສັງຄົມເທົ່ານັ້ນ. ຢູ່ບ່ອນນັ້ນບໍ່ມີການຕໍ່ສູ້ຊົນຊັ້ນ ເພາະວ່າບັນດາຊົນຊັ້ນທີ່ກົດຂີ່ຂູດຮີດໄດ້ຖືກລົບລ້າງໝົດແລ້ວ. ທຸກໆຊັ້ນຄົນໃນສັງຄົມ ທີ່ມຸ່ງໜ້າໄປສູ່ ຈຸດໝາຍອັນດຽວກັນນັ້ນ ລ້ວນແຕ່ເຂົ້າຮ່ວມຢ່າງມີການຈັດຕັ້ງໃນການປະຕິເສດ-ດ້ານທີ່ຫລ້າຫລັງໃນໂຄງຮ່າງຂອງສັງຄົມ. ຄວາມເປັນເອກະພາບດ້ານສັງຄົມ ແລະ ການເມືອງ-ແນວຄິດຂອງສັງຄົມກາຍເປັນກຳລັງດັນໃໝ່ທີ່ເຂັ້ມແຂງ - ຂອງການຂະຫຍາຍຕົວ.

ສະຫລຸບແລ້ວ ເລື່ອງທີ່ໄດ້ກ່າວມາຂ້າງເທິງນີ້ ສາມາດເວົ້າໄດ້ວ່າ, ກົດເກນການປະຕິເສດແຫ່ງຄວາມປະຕິເສດ ສະແດງເຖິງສາຍພົວພັນເຊິ່ງ ກັນ

ແລະກັນ ລະຫວ່າງໄລຍະຂະຫຍາຍຕົວທີ່ເປັນລຳດັບ ແລະ ເປັນທິດທາງລວມຂອງການຂະຫຍາຍຕົວໃນຂະນະທີ່ລົ້ມຄວ້າບັນດາຂະບວນວິວັດອັນລະອຽດຂອງການຂະຫຍາຍຕົວ ຕ້ອງເອົາໃຈໃສ່ຈຸດພິເສດລວມຂອງມັນ ທີ່ໄດ້ຮັບການສ່ອງແສງຈາກກົດເກນດັ່ງກ່າວ. ກ່ອນອື່ນຫມົດມັນແມ່ນລັກສະນະສັດຈະວິພາກຂອງການປະຕິເສດ ໂດຍສອດຄ່ອງກັບລັກສະນະດັ່ງກ່າວ ສິ່ງໃຫມ່ຕ້ອງຊະນະຢ່າງຫລີກເວັ້ນບໍ່ໄດ້ ແລະ ຕ້ອງດຳເນີນການຕໍ່ສູ້ຢ່າງເດັດຂາດເພື່ອຕ້ານກັບສິ່ງ ທີ່ຫລ້າຫລັງ.

ຮັກສາ ແລະ ຫມູນໃຊ້ທຸກສິ່ງທີ່ມີຄຸນຄ່າ ສຳລັບການເຄື່ອນຫນັງໄປທາງຫນ້າ, ຮັບເອົາມໍລະດົກອັນດີງາມຈາກອະດີດ ໂດຍມີການວິຈານ ແລະດັດແກ້ແບບປະດິດສ້າງນັ້ນກໍ່ແມ່ນຄວາມຮຽກຮ້ອງຕ້ອງການຕົ້ນຕໍຂອງກົດເກນນີ້ ເຊັ່ນດຽວກັນ. ຈະປະຕິເສດລ່ວງຫນ້າຮູບແບບທີ່ບໍ່ທັນຫມົດຄວາມອາດສາມາດ ທີ່ກ້າວຫນ້າເທື່ອນັ້ນ ແມ່ນບໍ່ໄດ້. ພ້ອມກັນນັ້ນຈະຊັກຊ້າໃນການປະຕິເສດ ຮູບແບບທີ່ຫລ້າຫລັງແລ້ວກໍ່ບໍ່ໄດ້ ເພາະໃນໄລຍະອັນແນ່ນອນຂອງການຂະຫຍາຍຕົວມັນຈະກາຍເປັນສິ່ງຖ່ວງດຶງ ແລະ ກີດຂວາງການເຄື່ອນຫນັງໄປ ທາງຫນ້າ.

ໂດຍສ່ອງແສງເຖິງ ລັກສະນະກ້າວຫນ້າຂອງການຂະຫຍາຍຕົວຂອງ ສັງຄົມ, ກົດເກນປະຕິເສດແຫ່ງຄວາມປະຕິເສດຊ່ວຍໃຫ້ຮັບຮູ້ວ່າ ໃນການເຄື່ອນໄຫວຕົວຈິງ ບໍ່ແມ່ນຈະ ຢຸດຢູ່ບ່ອນທີ່ບັນລຸໄດ້ແລ້ວ, ແຕ່ຕ້ອງເດີນໄປຫນ້າແລະບັນລຸຜົນສຳເລັດໃຫມ່. ໃນກໍລະນີກົງກັນຂ້າມ ຄວາມຫລ້າຫລັງແລະຄວາມຜິດພາດອັນຫນັກ ຫນ່ວງຈະເປັນສິ່ງຫລີກເວັ້ນບໍ່ໄດ້ ເພາະຊີວິດບໍ່ຢຸດຄ້າງຢູ່ ບ່ອນເກົ່າ.

ສິ່ງໃຫມ່ທີ່ບໍ່ມີໃຜເອົາຊະນະໄດ້, ການເຄື່ອນຫນັງແບບກ້າວໄປຫນ້າ - ຂອງສັງຄົມນັ້ນເປັນສິ່ງຢືນຢັນຄວາມເຊື່ອ ຫມັ້ນຂອງຊົນຊັ້ນກຳມະກອນແລະທົ່ວທັງຊາວຜູ້ອອກແຮງງານຕໍ່ໄຊຊະນະ ຂັ້ນສຸດທ້າຍຂອງການຕໍ່ສູ້ປະຕິວັດ ຂອງພວກເຂົາເຈົ້າ ຕໍ່ການພັງທະລາຍທີ່ຫລີກລ່ຽງບໍ່ໄດ້ຂອງທຶນນິຍົມ ແລະ ຕໍ່ ໄຊຊະນະຂອງສັງຄົມນິຍົມ ແລະ ກອມມູນິດນິຍົມ. ລັກສະນະພິເສດຂອງໂລກະທັດກອມມູນິດນິຍົມ ແມ່ນຄວາມເຊື່ອຫມັ້ນຕໍ່ອະນາຄົດ. ກົດເກນການປະຕິເສດແຫ່ງຄວາມປະຕິເສດແມ່ນພື້ນຖານແລະການສະແດງອອກແບບວິທະຍາສາດ -

ຂອງຄວາມເຊື່ອໝັ້ນດັ່ງກ່າວ.

## ໔. ອັນສະເພາະ, ພິເສດ ແລະ ລວມ

ວັດຖຸ ຄົງຢູ່ໃນຮູບການເປັນສິ່ງຂອງ, ປະກົດການ ແລະ ຂະບວນວິວັດ. ທຸກສິ່ງເຫລົ່ານັ້ນລ້ວນແຕ່ຄົງຢູ່ຢ່າງສະເພາະໃຜມັນ ໃນຖານະເປັນສ່ວນປະກອບວັດຖຸທີ່ເອກະລາດ. ພ້ອມກັນນັ້ນທຸກສິ່ງຂອງ ແລະ ປະກົດການລ້ວນແຕ່ ແຕກຕ່າງກັນ. ບໍ່ມີສິ່ງວັດຖຸໃດທີ່ຄືກັນຢ່າງເດັດຖານ. ແມ່ນແຕ່ໃນຕົ້ນໄມ້ຕົ້ນໜຶ່ງກໍບໍ່ມີ ໃບໄມ້ສອງໃບທີ່ຄືກັນ, ໃບໄມ້ແຕ່ລະໃບຕ້ອງແຕກຕ່າງດ້ານໃດ ດ້ານໜຶ່ງກັບໃບອື່ນໆ, ມີຈຸດສະເພາະ ແລະ ເປັນຈຸດພິເສດຂອງມັນພຽງໃບດຽວເທົ່ານັ້ນ. ການລວບລວມຈຸດພິເສດສ່ວນຕົວອັນທີ່ບໍ່ຊ້ຳເກົ່າຂອງສິ່ງວັດຖຸ ບາງຢ່າງ ແລະ ເຮັດໃຫ້ແຕກຕ່າງຈາກສິ່ງວັດຖຸອື່ນໆນັ້ນ ຮຽກເປັນອັນສະເພາະ. ຕົວຢ່າງກໍຄື ບົນພື້ນຖານບັນດາຈຸດພິເສດດັ່ງກ່າວ ພວກເຮົາສາມາດໄຈ້ ແຍກຄົນພູ້ທີ່ເຮົາລຶ້ງເຄີຍຈາກ ຫລາຍໆພັນຄົນ.

ຫາກແຕ່ສິ່ງວັດຖຸບໍ່ພຽງແຕ່ເປັນແບບຕົນ ແລະ ແຕກຕ່າງຈາກກັນ ເທົ່ານັ້ນ, ມັນຍັງຄ້າຍຄືກັນ. ບໍ່ມີສິ່ງວັດຖຸໃດທີ່ຈະບໍ່ມີອັນລວມກັນ. ເຊັ່ນໃບໄມ້ - ຄ້າຍຄືກັນໃນຫລາຍດ້ານ ດ້ວຍເຫດນັ້ນມັນຈຶ່ງແມ່ນໃບໄມ້ທັງ ໝົດ. ກະທັ້ງສິ່ງຂອງ, ເຊິ່ງເບິ່ງຜິວເຜີນຄືບໍ່ມີຫຍັງລວມກັນນັ້ນ ຍັງຄ້າຍຄືກັນໃນບາງຄຸນນະ- ພາບ ແລະ ລັກສະນະສະເພາະທີ່ເປັນທາດແທ້. ສາມາດສົມທຽບເບິ່ງ ທາດ ເຊັ່ນເພັດ ແລະ ແຮ່ສໍດຳ. ເພັດແມ່ນພະຫລຶກ ແມ່ນ ແກ້ວມະນີທີ່ມີຄ່າສູງ, ແຂງທີ່ສຸດ, ຕາມທຳມະດາບໍ່ມີສີ. ສ່ວນແຮ່ສໍດຳເປັນສີດຳ, ບາຍເບິ່ງ ເປັນໜຽວໆ, ອ່ອນທີ່ສຸດ. ແຕ່ທັງສອງທາດນີ້ມີອັນຄ້າຍຄືກັນ ເລິກເຊິ່ງທີ່ສຸດ ຢູ່ພາຍໃນ ແມ່ນສິ່ງທີ່ມີທາດເຄມີອັນດຽວກັນຄືທາດ ກາກບອນ. ດັ່ງນັ້ນ ຄຽງຄູ່ກັນກັບລັກສະນະສະເພາະໃຜມັນແລ້ວ ມັນຍັງມີທຸກໆລັກສະນະສະເພາະຂອງ- ກາກບອນ. ເນື່ອງຈາກວ່າກາກບອນແມ່ນທາດເຄມີ ສະນັ້ນເພັດ ແລະ ແຮ່ສໍດຳ ຍັງມີລັກສະນະສະເພາະດັ່ງເດີມຂອງທາດເຄມີອີກ. ສຸດທ້າຍທັງ ເພັດ ແລະແຮ່ສໍດຳ ແມ່ນສິ່ງວັດຖຸສະນັ້ນມັນຈຶ່ງມີຈຸດພິເສດເຊິ່ງເປັນອັນລວມ ສຳລັບ

ທຸກໆສິ່ງວັດຖຸທົ່ວໄປ.

ບັນດາຈຸດພິເສດທີ່ຄ້າຍຄືກັນອັນດຽວກັນ ແລະ ຊ້ຳຮອຍກັນຂອງຫມູ່ຫລື ກຸ່ມສິ່ງວັດຖຸນັ້ນ ແມ່ນອັນ ລວມ. ລະດັບຂອງລັກສະນະລວມກັນນັ້ນ ມີອັນ ແຕກຕ່າງກັນ. ຖ້າວ່າລັກສະນະສະເພາະເປັນ ກາກບອນນັ້ນ ເປັນອັນລວມກວ່າຖ້າທຽບໃສ່ລັກສະນະສະເພາະເປັນເພັດແລ້ວ, ແມ່ນວ່າທຽບໃສ່ລັກສະນະສະເພາະເປັນທາດເຄມີແລ້ວ ມັນແມ່ນອັນລວມຫນ້ອຍກວ່າ. ລັກສະນະສະເພາະແລະຈຸດພິເສດ ເຊິ່ງເປັນຂອງທຸກໆປະກົດການຂອງມູນຄວາມຈິງໂດຍບໍ່ມີກໍລະນີຍົກເວັ້ນນັ້ນ ແມ່ນອັນລວມທົ່ວໄປ, ຫລືອັນລວມກວ່າຫມູ່. ຈຸດພິເສດລວມທົ່ວໄປຂອງການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປະກົດການຮູບແບບການຄົງ ຢູ່ຂອງມັນໄດ້ຮັບການວິເຄາະໂດຍສັດຈະວິພາກ ແລະ ຖືກສ່ອງແສງອອກໃນບັນດາກົດເກນ ແລະ ມາດຕະເກນຂອງມັນ. ມາດຕະເກນທີ່ສຳຄັນກວ່າຫມູ່ແລະລວມກວ່າຫມູ່ໃນຈຳນວນມາດຕະເກນທັງ ຫມົດນັ້ນແມນມາດຕະເກນກ່ຽວ ກັບວັດຖຸ ເຊິ່ງກວມລວມເອົາທົ່ວທັງລັກສະນະຫລາຍຮູບຫລາຍແບບຢ່າງບໍ່ອາດຄະນານັບໄດ້ຂອງໂລກ ສິ່ງວັດຖຸ ແລະ ປະກົດການໂດຍອີງໃສ່ລັກສະນະ ສະເພາະລວມທົ່ວໄປຂອງມັນ ຄືລັກສະນະເປັນມູນຄວາມຈິງແບບພາວະວິໄສ.

ອັນລວມກໍ່ມີລັກສະນະພາວະວິໄສເຊັ່ນດຽວກັນກັບອັນສະເພາະ. ຈຸດພິ-ເສດຂອງການຄົງຢູ່ແບບພາວະວິໄສຂອງອັນລວມຢູ່ບ່ອນວ່າ ມັນບໍ່ແມ່ນຄົງ ຢູ່ຢ່າງຕັດຂາດຈາກສິ່ງວັດຖຸ ຕົວຈິງ ຈາກອັນສະເພາະ, ແຕ່ຫາກຢູ່ໃນອັນ ສະເພາະ, ຫມາຍຄວາມວ່າຢູ່ໃນກະໂຕສິ່ງວັດຖຸເຫລົ່ານີ້ໃນຖານະເປັນລັກສະນະລວມ, ຈຸດພິເສດ, ດ້ານຕ່າງໆຂອງມັນ. ຕົວຢ່າງ, ຫມາກໂປມ, ຫມາກຈອງ, ຫມາກຫມັ້ນແລະອື່ນໆ ມີລັກສະນະອັນເປັນລັກສະນະທົ່ວໄປສຳລັບ ມັນທັງຫມົດ, ແລະເປັນລັກສະນະສຳລັບ ຫມາກໄມ້ແຕ່ລະຊະນິດເອົ້າລວມ. ນີ້ລະແມ່ນອັນລວມ ທີ່ຄົງຢູ່ໃນອັນສະເພາະ ແລະ ໂດຍຜ່ານອັນສະເພາະ.

ໃນ "ສະຫມຸດປັດຊະຍາ"ວ.ອີ.ເລນິນ ໄດ້ຂຽນວ່າ:"...ອັນສະເພາະບໍ່ຄົງຢູ່ນອກເຫນືອສາຍພົວພັນ ທີ່ນຳໄປສູ່ອັນລວມ. ອັນລວມຄົງຢູ່ພຽງແຕ່ ໃນອັນສະເພາະ, ໂດຍຜ່ານອັນສະເພາະ. ອັນສະເພາະແຕ່ລະອັນລ້ວນແລ້ວແຕ່ແມ່ນອັນລວມ (ແບບນີ້ຫລືແບບນັ້ນ). ອັນລວມແຕ່ລະອັນລ້ວນແລ້ວແຕ່ ແມ່ນ (ພາກສ່ວນຫນຶ່ງຫລືດ້ານຫນຶ່ງຫລືທາດແທ້)ຂອງອັນສະເພາະ. ອັນລວມແຕ່ລະ

ອັນພຽງແຕ່ກວມລວມເອົາທຸກໆສິ່ງວັດຖຸຕ່າງຫາກ ພຽງສ່ວນໃດສ່ວນໜຶ່ງເທົ່ານັ້ນ. ອັນຕ່າງຫາກແຕ່ລະອັນປະກອບເຂົ້າໃນອັນລວມຢ່າງບໍ່ເຕັມສ່ວນ ແລະ ອື່ນໆຕ່າງກັນໄປ" ໑).

ອັນສະເພາະ ແລະ ອັນລວມປະກອບເປັນລັກສະນະພິເສດ, ດ້ານ,ພາກສ່ວນຂອງອັນຕ່າງຫາກ. ສ່ວນອັນຕ່າງຫາກແມ່ນສິ່ງວັດຖຸເວົ້າລວມ. ແຕ່ລະສິ່ງວັດຖຸຕົວຈິງແມ່ນຄວາມເປັນເອກະພາບຂອງອັນລວມ, ພິເສດ ແລະ ສະເພາະ. ຕົວຢ່າງແຕ່ລະຄົນມີບຸກຄະລິກລັກສະນະ (ອັນສະເພາະ), ຖ້າຫາກເຂົາແມ່ນກຳມະກອນວິສາຫະກິດອຸດສາຫະກຳ ເຂົາກໍ່ມີຈຸດພິເສດຂອງຊາວກຳມະກອນອຸດສາຫະກຳ (ອັນພິເສດ). ເຂົາຍັງມີຈຸດພິເສດເຊິ່ງເປັນຈຸດພິເສດຂອງຄົນທົ່ວໄປ (ອັນລວມ). ອັນພິເສດ ແມ່ນອັນລວມ ທີ່ໄດ້ສະແດງເຖິງຈຸດພິເສດຂອງຈຸໃດໜຶ່ງ.

ຄວາມເຂົ້າໃຈອັນຖືກຕ້ອງກ່ຽວກັບອັນລວມ ແລະ ການພົວພັນຂອງມັນກັບອັນສະເພາະ ແລະ ອັນຕ່າງຫາກນັ້ນມີຄວາມສຳຄັນສຳລັບການຮັບຮູ້ຢ່າງມີຜົນ. ອັນລວມ ຝັງຮາກໃນທາດແທ້ຂອງສິ່ງວັດຖຸ ແມ່ນການສະແດງຕົວ ເຖິງຄວາມເປັນເອກະພາບໃນຕົວຂອງມັນ. ດ້ວຍເຫດນັ້ນການຮັບຮູ້ທາດແທ້ຂອງສິ່ງວັດຖຸ ແລະ ປະກົດການ, ການຮັບຮູ້ກົດເກນຄົງຢູ່ຂອງມັນນັ້ນ ຈຶ່ງນອນຢູ່ໃນການຮັບຮູ້ອັນລວມ. ແຕ່ເພິ່ນສາມາດຮັບຮູ້ມັນໄດ້ພຽງແຕ່ໂດຍຜ່ານອັນຕ່າງຫາກ ແລະ ອັນສະເພາະເທົ່ານັ້ນ. ໃນຕອນ ຕົ້ນ ດ້ວຍການຊ່ວຍເຫຼືອຂອງອະໄວຍະວະຄວາມຮູ້ສຶກ ຄົນເຮົາຮັບຮູ້ບາງປະກົດການ ແລະ ລັກສະນະສະເພາະຂອງປະກົດການດັ່ງກ່າວ. ຫຼັງຈາກນັ້ນ ຈິນຕະນາການໃຈແຍກຄວາມຮັບຮູ້ດັ່ງ ກ່າວແຍກອັນສຳຄັນອອກຈາກອັນທີ່ບໍ່ສຳຄັນ, ແຍກອັນລວມອອກ ຈາກອັນສະເພາະແລ້ວສັງລວມ ແລະ ປະສົມປະສານກັບລັກສະນະລວມ ທີ່ເປັນທາດແທ້ຂອງປະກົດການປະເພດໃດໜຶ່ງແລ້ວ ກໍ່ຕັ້ງຄວາມຮັບຮູ້ກ່ຽວກັບບັນດາປະກົດການ ດັ່ງກ່າວ. ຄວາມຮັບຮູ້ສະ ແດງເຖິງບັນດາຈຸດພິເສດລວມທີ່ເປັນທາດແທ້ທີ່ມີ ສະເພາະສຳລັບປະເພດທີ່ແນ່ນອນຂອງບັນດາປະກົດການ. ເວົ້າລວມແລ້ວ ຂະບວນວິວັດການຮັບຮູ້ດຳເນີນຈາກອັນສະເພາະ ໂດຍຜ່ານອັນພິເສດໄປເຖິງອັນ

---

໑) ວ.ອີ.ເລນິນ ປະມວນບົດນິພົນຄົບຊຸດ, ເຫຼັ້ມ ໒໙, ໜ້າ ໓໑໘.

ລວມ ແລະ ອັນລວມທົ່ວໄປ.

ມາດຕະເກນດັ່ງກ່າວ ຍັງຊ່ວຍໃຫ້ເຂົ້າໃຈຢ່າງຖືກຕ້ອງຕໍ່ຂະບວນວິວັດໃຫ້ເກີດມີອັນໃຫມ່ ເຊິ່ງບໍ່ແມ່ນເກີດມີຂຶ້ນມາໂລດ. ໃນໄລຍະຕົ້ນ ມັນເກີດມີຂຶ້ນ-ມາຄືອັນສະເພາະ, ຫລັງຈາກນັ້ນກໍ່ເຂັ້ມແຂງ ແລະ ກໍ່ຕັ້ງຂຶ້ນມາ ກາຍ ເປັນອັນພິເສດ, ແລະ ຕໍ່ໄປຈຶ່ງກາຍເປັນອັນລວມ ຫລືອັນລວມທົ່ວໄປ.

ບັນດາທັດສະນະແບບອະພິທຳກ່ຽວກັບການພົວພັນກັນ ລະຫວ່າງອັນລວມ, ພິເສດ ແລະ ສະເພາະນັ້ນ ນຳໄປເຖິງຄວາມຜິດພາດອັນຫນັກຫນ່ວງດ້ານທິດສະດີ ແລະ ການເມືອງ. ຜູ້ຄົນທີ່ຍຶດຖືທັດສະນະດັ່ງກ່າວບໍ່ເຂົ້າໃຈວ່າ ອັນລວມຄົງຢູ່ໃນອັນຕ່າງຫາກ ຢ່າງຄຽງຄູ່ກັນກັບອັນສະເພາະ ດ້ວຍເຫດນັ້ນ ເວລາໃດກໍ່ສະແດງຕົວອອກໃນຮູບແບບທີ່ລະອຽດໂດຍຂຶ້ນກັບເງື່ອນໄຂການ ຂະຫຍາຍຕົວຂອງບັນດາປະກົດການ. ການເບິ່ງຂ້າມອັນສະເພາະ ການນຳໃຊ້-ອັນລວມ ໂດຍບໍ່ຂຶ້ນກັບການປ່ຽນແປງດ້ານເງື່ອນໄຂນັ້ນ ແມ່ນຈຸດພິເສດ ຂອງລັດທິຄຳພີຕາຍຕົວ ທີ່ຢືນຢັນຫລັກສູດລວມໂດຍບໍ່ຄຳນຶງເຖິງສະຖານະການ - ໃຫມ່ ອັນທີ່ນຳໄປເຖິງການຫ່າງເຫີນຈາກມະຫາຊົນ ຈາກຊີວິດ.

ການຖືເບົາ ຫລືການປະຕິເສດໂດຍກົງບົດບາດຂອງອັນລວມ ແລະ ຖືສຳຄັນບົດບາດຂອງອັນສະເພາະ ແລະ ພິເສດນັ້ນ ແມ່ນຫນຶ່ງໃນຈຳນວນເຫດຜົນຕົ້ນກຳເນີດຂອງລັດທິແກ້ອຽງຂວາ. ຜູ້ຕາງຫນ້າຂອງມັນປົກປິດຫລືປະຕິ ເສດວ່າບໍ່ມີກົດເກນລວມຂອງການປະຕິວັດສັງຄົມນິຍົມສຳລັບທຸກໆປະເທດ, ຖືສຳຄັນຈຸດພິເສດຂອງບາງປະເທດ, ໃນຕົວຈິງແລ້ວອັນນີ້ນຳໄປເຖິງການປະຕິເສດ-ການປະຕິວັດ ແລະ ສັງຄົມນິຍົມ. ລັດທິມາກ-ເລນິນ ເລີ່ມຕົ້ນຈາກການທີ່ວ່າການປະຕິບັດບັນດາກົດເກນລວມຂອງການປະຕິວັດສັງຄົມນິຍົມ,ຂອງການ ກໍ່ສ້າງສັງຄົມນິຍົມນັ້ນ ເປັນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້ ເພາະກົດເກນເຫຼົ່ານັ້ນມີຄວາມຫມາຍຕັດສິນຊີຂາດ. ໃນຂະນະດຽວກັນນັ້ນລັດທິມາກ-ເລນິນ ຮຽກຮ້ອງໃຫ້ໄຈ້ແຍກ ແລະ ຄຳນຶງເຖິງ ບັນດາຈຸດພິເສດໃນການສະແດງ ຕົວອອກມາຂອງບັນດາກົດເກນດັ່ງກ່າວ ໂດຍຂຶ້ນກັບເງື່ອນໄຂປະຫວັດສາດ ລະອຽດໃນແຕ່ລະປະເທດ.

ຄວາມບໍ່ເຂົ້າໃຈຫລືເບິ່ງຂ້າມສັດຈະວິພາກຂອງການພົວພັນ ລະຫວ່າງອັນລວມ, ອັນຕ່າງຫາກ ແລະ ສະເພາະນັ້ນ ນຳໄປເຖິງການເສກສັນປັ້ນແຕ່ງທີ່

ມີຜົນຮ້າຍກ່ຽວກັບອັນທີ່ຮຽກເປັນຮູບການຕ່າງໆ ຂອງລັດທິມາກ ຕາມລັກ ສະນະພູມສາດ, ຊາດ ແລະ ອື່ນໆ. ຈະເອົາຂອບເຂດຊາດມາຈຳກັດລັດທິມາກ-ເລນິນ ນັ້ນແມ່ນບໍ່ໄດ້. ອັນນີ້ແມ່ນທິດສະດີສາກົນທີ່ເປັນເອກະພາບ ແລະຄົບຖ້ວນ ທີ່ມີສັດຈະທຳລວມພາວະວິໄສສຳລັບທຸກປະຊາຊາດ ທີ່ພົ້ນຂະຫຍາຍຢູ່ໃນປະເທດໃດຫນຶ່ງ ໂດຍຄຳນຶງເຖິງຈຸດພິເສດນີ້ຫລືຈຸດພິເສດນັ້ນ.

## ໕. ເຫດ ແລະ ຜົນ

ເຫດການທີ່ບໍ່ມີສາຍເຫດນັ້ນ ບໍ່ມີເລີຍ. ເຫດການເວລາໃດ ກໍ່ແມ່ນ ຜົນຂອງສາຍເຫດອັນແນ່ນອນ. ການຊອກເຫັນສາຍເຫດຂອງປະກົດການຫລືເຫດການນັ້ນແມ່ນໄລຍະອັນສຳຄັນຂອງການຮັບຮູ້ມັນ. ເຫດ ແລະ ຜົນນັ້ນ ແມ່ນ-ຫຍັງແທ້ ? ສາຍພົວພັນລະຫວ່າງພວກມັນເປັນຄືແນວໃດ ?

ສາຍພົວພັນແບບມີເຫດ ແລະ ມີຜົນ ຫລືລັກສະນະມີເຫດຜົນ ແມ່ນຫນຶ່ງ-ໃນຈຳນວນຮູບແບບຂອງສາຍພົວພັນລວມທົ່ວໄປ, ເຊິ່ງໃນສາຍພົວພັນນີ້ ປະກົດການຫນຶ່ງຫລືສະພາວະການຫນຶ່ງກຳນົດເງື່ອນໄຂ ພາໃຫ້ປະກົດການຫລືສະພາວະການອື່ນເກີດຂຶ້ນມາ. ປັດໄຈຫລືສະພາວະການທີ່ພາໃຫ້ປະກົດການ ໃດຫນຶ່ງເກີດຂຶ້ນມານັ້ນຮຽກເປັນ ເຫດ. ເຫດສ້າງເງື່ອນໄຂໃຫ້ເກີດມີ ປະກົດການ ການປ່ຽນແປງສະພາບການຂອງມັນ ຫລືການຫາຍໄປຂອງມັນ. ຫມາກຜົນຂອງການກະທົບຂອງເຫດນັ້ນຮຽກເປັນຜົນ.

ສາຍພົວພັນແບບມີເຫດຜົນນັ້ນມີລັກສະນະພິເສດໃດແດ່ ?

ເຫດຜົນລະຫວ່າງປະກົດການນັ້ນມີລັກສະນະລວມທົ່ວໄປ. ບໍ່ມີປະກົດການໃດ ບໍ່ມີເຫດການໃດທີ່ຈະບໍ່ມີເຫດທຳມະຊາດຂອງຕົນ. ເຫດ ຜົນນັ້ນ ແມ່ນກົດເກນລວມທົ່ວໄປຂອງໂລກພາວະວິໄສ ໂດຍບໍ່ມີການຍົກເວັ້ນແຕ່ປະການໃດ.

ການພົວພັນແບບມີເຫດ ມີຜົນນັ້ນ ເປັນລັກສະນະພາວະວິໄສຫມາຍຄວາມວ່າມັນເປັນລັກສະນະສະເພາະຂອງປະກົດການໃນໂລກພາວວິໄສ ແລະ ບໍ່ຂຶ້ນກັບຈິດສຳນຶກຂອງຄົນ. ວ.ອີ.ເລນິນໄດ້ຂຽນໃນບົດ "ລັດທິວັດຖຸນິຍົມແລະລັດທິບົດຮຽນຕຳຫນິວິພາກ" ນັ້ນວ່າ ເຫດຜົນນັ້ນມີຢູ່ໃນກະໂຕສິ່ງວັດຖຸນັ້ນເອງ ,

ຫາກບໍ່ແມ່ນຖືກນຳເຂົ້າມາຈາກພາຍນອກ.

ກ່ຽວກັບລັກສະນະຂອງການພົວພັນແບບມີເຫດມີຜົນນັ້ນ ມີການດຳເນີນ-ການຕໍ່ສູ້ຢ່າງຮ້າຍແຮງ ລະຫວ່າງສອງທ່າອຽງຕົ້ນຕໍຂອງປັດຊະຍາ ຄືລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມນັ້ນມາແຕ່ດົນແລ້ວ. ບັນດານັກວັດຖຸນິຍົມຢືນຢູ່-ໃນທັດສະນະລັດທິນິຍັດນິຍົມ ເຊິ່ງເປັນທັດສະດີທີ່ຢັ້ງຢືນວ່າ ການສ້າງ ເງື່ອນໄຂ, ລວມທັງການສ້າງເງື່ອນໄຂແບບມີເຫດຜົນນັ້ນ ມີລັກສະນະລວມທົ່ວ ໄປ ແລະ ພາວະວິໄສ. ບັນດານັກຈິດຕະນິຍົມອັດຕະວິໄສຢືນຢູ່ໃນທັດສະນະລັດ ທິອະນິຍັດນິຍົມ ເຊິ່ງເປັນ ທັດສະດີທີ່ປະຕິເສດລັກສະນະພາວະວິໄສ ແລະລວມທົ່ວໄປຂອງການສ້າງເງື່ອນໄຂ ແລະ ເຫດຜົນ ລະຫວ່າງປະກົດການ. ພວກເຂົາເຈົ້າປະກາດວ່າ ການມີເຫດມີຜົນນັ້ນ ພຽງແຕ່ແມ່ນຄວາມຕໍ່ເນື່ອງ ຂອງຄວາມຮູ້ສຶກທີ່ຊິນເຄີຍ ແລະ ຊ້ຳຮອຍ, ຫລືວ່າມີປະຈຳຢູ່ໃນຕົວຄົນມາ ກ່ອນການທົດລອງໃດໆ ແລະ ຄົງຢູ່ພຽງແຕ່ໃນຈິດສຳນຶກເທົ່ານັ້ນ. ພວກເຂົາເຈົ້າພະຍາຍາມຢັ້ງຢືນທັດສະດີຂອງຕົນໂດຍອີງໃສ່ທັດສະດີຂອງພວກຈິດຕະນິຍົມວັດຖຸວິທະຍາ" ກ່ຽວກັບການທີ່ວ່າໃນອະນຸໂລກ ບໍ່ມີລັກສະນະແບບມີເຫດມີຜົນ . ໃນຕົວຈິງແລ້ວ ໃນອະນຸໂລກບໍ່ມີເຫດປັນແບບກົນຈັກ, ແຕ່ບໍ່ແມ່ນວ່າບໍ່ມີ ເຫດຜົນເວົ້າລວມ; ຢູ່ນັ້ນມັນກໍກະທົບເຊັ່ນດຽວກັນ ແຕ່ຢູ່ໃນຮູບແບບສະເພາະ.

ເຖິງວ່າບັນດານັກຈິດຕະນິຍົມອັດຕະວິໄສ"ຮັບຮູ້"ເຫດຜົນແຕ່ສຳລັບ ພວກເຂົາເຈົ້າແລ້ວ ເຫດຜົນແມ່ນຢູ່ໃນມະໂນພາບ, ເປັນແບບມະຫັດສະຈັນ ແລະ ເລີ່ມຈາກແນວຄິດເດັດຖານ, ວິນຍານ, ພະເຈົ້າ ແລະ ອື່ນໆ.

ລັກສະນະຈຳເປັນ ແມ່ນຈຸດພິເສດຕໍ່ໄປຂອງສາຍພົວພັນແບບມີເຫດ ມີຜົນນັ້ນໝາຍຄວາມວ່າ ຖ້າຫາກມີເງື່ອນໄຂອັນເໝາະສົມແລ້ວ ເຫດທີ່ແນ່ ນອນຈະນຳໄປເຖິງຜົນອັນແນ່ນອນຢ່າງຫລີກເວັ້ນບໍ່ໄດ້. ຕົວຢ່າງການເຜົາ ໂລຫະໃຫ້ຮ້ອນຂຶ້ນນັ້ນ ຈະ ນຳໄປເຖິງການຍືດຕົວອອກຂອງມັນດ້ວຍຄວາມ ຈຳເປັນ ແຕ່ຫາກບໍ່ສາມາດເຮັດໃຫ້ມັນ ກາຍເປັນໂລຫະຫລືທາດອື່ນໄດ້. ຈາກ ແນວເຂົ້າທີ່ໄດ້ຫວ່ານລົງດິນ ຖ້າຫາກມີເງື່ອນໄຂອັນເໝາະສົມແລ້ວ ຈະປົ່ງ ອອກເປັນຕົ້ນເຂົ້າ ແລະ ຖ້າຈະຄອງໃຫ້ມັນເກີດເປັນແນວອື່ນກໍຈະບໍ່ມີປະໂຫຍດ - ຫຍັງເລີຍ.

ບັນດາເຫດພາໃຫ້ເກີດມີການກະທົບອັນແນ່ນອນພຽງແຕ່ພາຍໃຕ້ເງື່ອນໄຂ

ທີ່ເຫມາະສົມ. ເຫດແມ່ນອັນທີ່ພາໃຫ້ເກີດມີຜົນ. ເງື່ອນໄຂແມ່ນປະກົດການທີ່ຈຳເປັນສຳລັບໃຫ້ເກີດມີຜົນ, ສ້າງຄວາມສະດວກໃຫ້ແກ່ການເກີດມີຜົນ, ແຕ່ມັນເອງບໍ່ສາມາດເຮັດໃຫ້ເກີດມີຜົນໄດ້. ຕົວຢ່າງເພື່ອຈູດໄມ້ຂີດໄຟໃຫ້ລຸກນັ້ນຈຳເປັນຕ້ອງມີຫລາຍເງື່ອນໄຂ; ໄມ້ຂີດໄຟຕ້ອງແຫ້ງ, ຕ້ອງຫມັ້ນພໍສົມຄວນ, ໃນອາກາດຕ້ອງມີອົກຊີແຊນ ແລະ ອື່ນໆ. ຫາກແຕ່ລັກສະນະແຫ້ງແລະ ຫມັ້ນບໍ່ສາມາດຈະເຮັດໃຫ້ໄມ້ຂີດໄຟໄຫມ້ຂຶ້ນໄດ້. ເພື່ອຈຸດປະສົງນີ້ຈຳເປັນຕ້ອງ ມີການຮຸກຖູລະຫວ່າງໄມ້ຂີດໄຟແລະກັບໄຟ.

ລັກສະນະພິເສດທີ່ສຳຄັນ ຂອງສາຍພົວພັນແບບມີເຫດມີຜົນນັ້ນ ແມ່ນການຕໍ່ເນື່ອງຢ່າງເຄັ່ງຄັດຂອງມັນໃນກາລະເວລາ: ປະກົດການທີ່ກາຍເປັນເຫດ-ນັ້ນຕ້ອງໄປກ່ອນຜົນ. ຜົນບໍ່ສາມາດຈະເກີດຂຶ້ນມາກ່ອນປະກົດການນີ້ຫລືຈົນກະທັ້ງວ່າພ້ອມກັນກັບມັນ, ແຕ່ຫາກເກີດຂຶ້ນລຸນນັ້ນຫນ້ອຍຫນຶ່ງ. ພ້ອມນັ້ນອັນ ທີ່ເກີດຂຶ້ນມາກ່ອນໃນກາລະເວລານັ້ນເຖິງຈະແມ່ນເງື່ອນໄຂອັນຈຳເປັນ, ແຕ່ບໍ່ແມ່ນເງື່ອນໄຂອັນພຽງພໍເພື່ອຈະເຮັດໃຫ້ປະກົດການດັ່ງກ່າວນີ້ກາຍເປັນເຫດ. ບໍ່ແມ່ນທຸກສິ່ງທີ່ເກີດກ່ອນປະກົດການໃດຫນຶ່ງນັ້ນ ລ້ວນແລ້ວແຕ່ແມ່ນເຫດ ຂອງມັນ. "ຫລັງຈາກນັ້ນ" ບໍ່ແມ່ນເວລາໃດກໍ່ຫມາຍເຖິງ "ດ້ວຍເຫດນັ້ນ". ລະດູຮ້ອນເວລາໃດກໍ່ມາຕາມຫລັງລະດູບານໃຫມ່, ລະດູໃບໄມ້ຫລົ່ນຕາມຫລັງລະດູຮ້ອນ ແລະ ຕໍ່ໆໄປ ແຕ່ລະດູບານໃຫມ່ບໍ່ແມ່ນເຫດຂອງລະດູຮ້ອນ, ແລະລະດູຮ້ອນບໍ່ແມ່ນເຫດຂອງລະດູໃບໄມ້ຫລົ່ນ. ການຫມູນວຽນຂອງລະດູການມີ ຂຶ້ນມາຍ້ອນການເຄື່ອນເຫນັງອ້ອມຂ້າງຕາເວັນຂອງຫນ່ວຍໂລກ ແລະຍ້ອນ ແກນຂອງຫນ່ວຍໂລກງ່ຽງຖາທຽບໃສ່ຫນ້າພຽງຂອງວົງໂຄຈອນ.

ເຫດສາມາດເປັນແບບພາຍນອກ, ກໍ່ຄືແບບພາຍໃນ. ເຫດພາຍໃນທີ່ພາໃຫ້ສິ່ງວັດຖຸເກີດມີການປ່ຽນແປງນັ້ນຝັງຮາກຢູ່ໃນທຳມະຊາດຂອງສິ່ງວັດຖຸ ນັ້ນເອງ, ແມ່ນການກະທົບເຊິ່ງກັນ ແລະ ກັນລະຫວ່າງດ້ານໃດຫນຶ່ງຂອງມັນ . ເຫດພາຍໃນສຳຄັນກວ່າພາຍນອກ. ເຊັ່ນ ເຫດພາຍໃນຂອງທຸກໆການປະຕິ-ວັດສັງຄົມນິຍົມນັ້ນ ແມ່ນຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ແລະການພົວພັນແຫ່ງການຜະລິດຂອງແບບວິທີການຜະລິດອັນແນ່ນອນໃນປະເທດໃດຫນຶ່ງ, ແຕ່ຫາກບໍ່ແມ່ນການກະທົບຂອງກຳລັງພາຍນອກໃດຫນຶ່ງ.

ໃນກໍລະນີທີ່ເຫດແມ່ນເຫດພາຍນອກແລ້ວ ມັນບໍ່ແມ່ນເຫດດັ່ງກ່າວເປັນ ຜູ້

ນຳເອົາຜົນເຂົ້າມາຫລືພາໃຫ້ຜົນກຳເນີດຂື້ນມາຢ່າງງ່າຍດາຍ ແຕ່ວ່າຜົນ ນີ້ແມ່ນຫມາກຜົນຂອງການກະທົບເຊິ່ງກັນ ແລະ ກັນລະຫວ່າງປະກົດການ ທີ່ຖືເປັນເຫດ ແລະ ປະກົດການທີ່ມັນກະທົບໃສ່. ດ້ວຍເຫດນີ້ເອງ ປະກົດ ການອັນດຽວກັນ ຈຶ່ງສາມາດພາໃຫ້ເກີດມີການກະທົບທີ່ແຕກຕ່າງກັນ. ຕົວຢ່າງ - ພາຍໃຕ້ ການກະທົບຂອງແສງຕາເວັນ ນ້ຳກ້ອນເປື່ອຍ, ພືດພັນເຕີບໃຫຍ່ຂະຫຍາຍຕົວ. ຍັງມີກໍລະນີ ໃນເມື່ອປະກົດການຕ່າງໆພາໃຫ້ເກີດມີການກະ ທົບອັນດຽວກັນ. ເຊັ່ນຜົນເກັບກ່ຽວພືດເມັດນັ້ນຕ່ຳ ອັນນີ້ສາມາດແມ່ນຫມາກຜົນຂອງການກະທົບຂອງສະພາວະການທີ່ແຕກຕ່າງກັນທີ່ສຸດ. ດັ່ງນີ້ ເຫດຕົວ ຈິງຂອງປະກົດການຈຶ່ງແມ່ນການກະທົບຊຶ່ງກັນ ແລະກັນ ຫລືວ່າລະຫວ່າງ ເປົ້າຫມາຍຕ່າງໆ ຫລືວ່າລະຫວ່າງດ້ານຂອງເປົ້າຫມາຍຫນຶ່ງ ຫລືວ່າທັງອັນທີ່ຫນຶ່ງ ແລະ ທັງອັນທີສອງ ຫມາຍຄວາມວ່າ ການລວບລວມບັນດາປັດໄຈພາຍ ໃນ ແລະ ພາຍນອກ. ຟ.ອັງແກນ ຂຽນວ່າ: "...ການກະທົບຊຶ່ງກັນ ແລະກັນແມ່ນ causa finalis * ອັນແທ້ຈິງຂອງສິ່ງວັດຖຸ "໑).

ຫລັງຈາກເຫດພາໃຫ້ເກີດມີຜົນແລ້ວ ສາຍພົວພັນລະຫວ່າງເຫດແລະ ຜົນຍັງບໍ່ຍຸດຕິ. ຂໍ້ທີຫນຶ່ງ ຜົນແມ່ນອັນເກີດລຸນ ຂຶ້ນກັບເຫດ, ສາມາດສົ່ງຜົນ ສະທ້ອນຄືນສູ່ເຫດ. ເຊັ່ນ ອົງການຈັດຕັ້ງສັງຄົມຕ່າງໆ, ໃນນັ້ນລວມທັງລັດເອງໃນຜົນສຸດທ້າຍແລ້ວເກີດມີຂຶ້ນມາໃນຖານະເປັນໂຄງປົນຢູ່ເທິງພື້ນຖານເສດຖະກິດ ແຕ່ໃນເມື່ອໄດ້ເກີດຂຶ້ນ ແລະ ໄດ້ກໍ່ຕັ້ງຂຶ້ນມາແລ້ວ ມັນສົ່ງຜົນສະທ້ອນ - ຢ່າງຕັ້ງຫນ້າໄປສູ່ເສດຖະກິດ ແລະ ດ້ານອື່ນໆຂອງຊີວິດສັງຄົມ. ຂໍ້ທີ ສອງເຫດ ແລະ ຜົນສາມາດປ່ຽນແທນບ່ອນກັນ, ແຕ່ວ່າໃນລະດັບແຕກຕ່າງກັນ . ເຫດການໃນທີ່ນີ້ຫລືດຽວນີ້ ແມ່ນຜົນທີ່ສາມາດເປັນເຫດໃນກໍລະນີອື່ນໆຫລື ໃນກາລະເວລາອື່ນ. ເພາະວ່າບໍ່ມີປະກົດການໃດທີ່ຢູ່ໃນສາຍພົວພັນແບບມີ ເຫດມີຜົນອັນຫນຶ່ງອັນດຽວເທົ່ານັ້ນ, ແຕ່ຫາກຢູ່ໃນຕາຫນ່າງສາຍພົວພັນດັ່ງກ່າວ , ແລະ ດ້ວຍເຫດນັ້ນ ໃນຂອດຕ່າງໆຂອງຕາຫນ່າງດັ່ງກ່າວປະກົດການສາມາດເປັນເຫດ, ຫລືເປັນຜົນ. ຕົວຢ່າງຝົນຫລືຫິມະແມ່ນຜົນຂອງເງື່ອນໄຂດ້ານ ອຸ

---

* ) ເຫດສຸດທ້າຍ ( ຜູ້ຮຽບຮຽງ )

໑) ກ.ມາກ ແລະ ຟ.ອັງແກນ ປະມວນບົດນິພົນ ເຫລັ້ມ ໒໐,ຫນ້າ໕໔໖.

ຕູນິຍົມອັນແນ່ນອນ, ກະໂຕສິ່ງເຫລົ່ານີ້ກໍ່ສາມາດຈະເປັນເຫດໃຫ້ແກ່ພົນ ເກັບກ່ຽວທີ່ສູງ ແລະ ພົນເກັບກ່ຽວເປັນເຫດໃຫ້ແກ່ການເພີ່ມທະວີເສດຖະກິດແລະອື່ນໆ.

ເຫດການ ແລະ ປະກົດການຕ່າງໆ ໂດຍສະເພາະເຫດການ ແລະ ປະກົດການທີ່ສັບສົນ ບໍ່ແມ່ນມີແຕ່ເຫດອັນດຽວ ຫາກມີຫລາຍອັນ ແຕ່ມັນມີຄວາມ-ໝາຍຢ່າງແຕກຕ່າງກັນ. ມີເຫດອັນຕົ້ນຕໍ ແລະ ບໍ່ຕົ້ນຕໍ ລວມແລະໂດຍກົງ. ຊອກເຫັນເຫດ ຕົ້ນຕໍ, ຕັດສິນໃນຈຳນວນເຫດທັງໝົດນັ້ນເປັນສິ່ງສຳຄັນ.ສັດຈະວິພາກຮຽກຮ້ອງໃຫ້ໄຈ້ແຍກທຸກໆເຫດ ແລະ ປະກົດການແລ້ວ ຊອກໃຫ້ - ເຫັນເຫດຕົ້ນຕໍ, ຕັດສິນ. ເຊັ່ນ ການຂະຫຍາຍຕົວຂອງສັງຄົມຂຶ້ນກັບ ຄວາມໜາແໜ້ນ ແລະ ການເພີ່ມທະວີຈຳນວນພົນລະເມືອງ, ຂຶ້ນກັບເງື່ອນໄຂທຳມະຊາດ, ການຜະລິດຊັບສິນວັດຖຸ ແນວຄິດ ແລະ ທິດສະດີແລະອື່ນໆ. ຮັບຮູ້ທຸກໆປັດໄຈດັ່ງກ່າວແລ້ວ ລັດທິມາກ ໄດ້ແຍກການຜະລິດຊັບສິນວັດຖຸອອກ ຄື ເປັນກຳລັງທີ່ສຳຄັນຂອງການຂະຫຍາຍຕົວຂອງສັງຄົມ ແລະ ການກະທົບຂອງປັດໄຈອື່ນໆທັງໝົດນັ້ນລ້ວນແຕ່ຂຶ້ນກັບມັນ.

ທິດສະດີສັດຈະວິພາກກ່ຽວກັບການມີເຫດມີຜົນນັ້ນ ກົງກັນຂ້າມກັບເທວະ-ວິທະຍາ ເຊິ່ງແມ່ນທິດສະດີຂອງສາສະໜາ ແລະ ຈິດຕະນິຍົມ ກ່ຽວ ກັບຈຸດປະສົງ. ເທວະວິທະຍາ ອະທິບາຍວ່າ ຕົກກະປັນຍາ ຂອງທຳມະຊາດນັ້ນເກີດຂຶ້ນຍ້ອນຄວາມປີຊາສາມາດຂອງ"ຜູ້ສ້າງໂລກ"ເທົ່ານັ້ນ. ແຕ່ຊີວະ ສາດ-ແບບວິທະຍາສາດ ໄດ້ຊີ້ແຈງວ່າ ຕົກກະປັນຍາແບບທຽບຖານທີ່ມີຢ່າງ ແທ້ຈິງຢູ່ໃນທຳມະຊາດທີ່ມີຊີວິດນັ້ນ ໄດ້ເກີດມີຂຶ້ນມາທາມກາງວິວັດທະນາການ ໃນໄລຍະຍາວນານ, ຕາມເສັ້ນທາງທີ່ຖືກຕາມກົດເກນທຳມະຊາດ. ຈຸດປະ ສົງພຽງແຕ່ປະກົດຕົວຂຶ້ນ ຢູ່ບ່ອນທີ່ມີຄົນເຄື່ອນໄຫວ, ໝາຍຄວາມວ່າໃນຊີວິດ - ຂອງສັງຄົມ.

ການຮັບຮູ້ສາຍພົວພັນແບບມີເຫດມີຜົນ, ການຊອກເຫັນ ເຫດຕົວຈິງຂອງເຫດການ, ຂະບວນວິວັດ, ປະກົດການນັ້ນ ມີຄວາມສຳຄັນທີ່ສຸດໃນພາກປະຕິບັດຕົວຈິງຂອງຄົນ ເພື່ອການຄາດຄະເນແບບວິທະຍາສາດ, ເພື່ອການກະທົບຕໍ່ຂະບວນວິວັດຂອງມູນຄວາມຈິງ, ເພື່ອການປ່ຽນແປງມັນຕາມທິດທາງທີ່ ຈຳເປັນສຳລັບສັງຄົມ.

## ໖. ຄວາມຈຳເປັນ ແລະ ຄວາມບັງເອີນ

ຕາມທຳມະດາແລ້ວ ປັດຊະຍາ ກ່ອນລັດທິມາກແກ້ໄຂບັນຫາການພົວ ພັນກັນລະຫວ່າງຄວາມຈຳເປັນ ແລະ ຄວາມບັງເອີນນັ້ນ ແບບດ້ານດຽວ. ບັນດານັກວັດຖຸນິຍົມຖືວ່າທຸກສິ່ງໃນທຳມະຊາດລ້ວນແຕ່ຈຳເປັນທັງນັ້ນ ເພາະ ວ່າທຸກສິ່ງເກີດຂຶ້ນມາດ້ວຍເຫດ ແລະ ບໍ່ມີຄວາມບັງເອີນແຕ່ປະການໃດ. ບັນດານັກຈິດຕະນິຍົມ-ອະນິຍັດນິຍົມ ຢືນຢັນວ່າ ປະກົດການບໍ່ມີການເກີດຂຶ້ນມາດ້ວຍເຫດ ແລະ ດ້ວຍເຫດນັ້ນໃນໂລກບໍ່ມີຄວາມຈຳເປັນ ຫາກແມ່ນຄວາມບັງເອີນເປັນເຈົ້າ.

ຄວາມ ເຫັນແບບຊຸນແຮງເຫລົ່ານີ້ ໃຫ້ຄວາມຕອບອັນບໍ່ຖືກຕ້ອງຕໍ່ບັນຫາ ແລະ ແມ່ນຫມາກຜົນຂອງທັດສະນະແບບອະພິທຳ. ອະພິທຳຕີລາດກວາດ - ພຽງຄວາມຈຳເປັນກັບສາຍພົວພັນແບບມີເຫດມີຜົນ, ອັນນີ້ບໍ່ຖືກ ເພາະບໍ່ພຽງແຕ່ຄວາມຈຳເປັນເທົ່ານັ້ນ ກຳນົດດ້ວຍເຫດ, ແຕ່ທັງຄວາມບັງເອີນກໍເກີດຂຶ້ນມາດ້ວຍເຫດເຊັ່ນດຽວກັນ. ອະພິທຳ ຍັງຕັດແບ່ງຄວາມຈຳເປັນ ແລະຄວາມບັງເອີນອອກຈາກກັນ ແລະ ຕັ້ງໃຫ້ ມັນຕ້ານກັນ. ອະພິທຳຖືວ່າ ບ່ອນໃດ ທີ ມີຄວາມຈຳເປັນແລ້ວ ບໍ່ອາດຈະມີຄວາມບັງເອີນ ແລະ ບ່ອນໃດທີ່ມີຄວາມບັງເອີນແລ້ວບໍ່ອາດຈະມີຄວາມຈຳເປັນ. ໃນຕົວຈິງແລ້ວ ຄວາມຈຳເປັນ ແລະ ຄວາມບັງເອີນພົວພັນເຊິ່ງກັນ ແລະ ກັນ, ແລະຄອນໄຈ້ແຍກມັນພຽງແຕ່ ໃນການພົວພັນ ແລະ ຄວາມເປັນເອກະພາບເຊິ່ງກັນ ແລະ ກັນເທົ່ານັ້ນ.

ຄວາມຈຳເປັນ ແລະ ຄວາມບັງເອີນ ແມ່ນຫຍັງແທ້, ມັນພົວພັນເຊິ່ງກັນ ແລະ ກັນຄືແນວໃດ ?

ຄວາມຈຳເປັນແມ່ນບາດກ້າວຂະຫຍາຍຕົວທີ່ຫລີກລ່ຽງບໍ່ໄດ້ຂອງປະກົດ - ການ, ທີ່ອອກມາຈາກທາດແທ້ຂອງປະກົດການ ແລະ ກຳນົດດ້ວຍທຸກໆ ການຂະຫຍາຍຕົວ ແລະ ການກະທົບເຊິ່ງກັນ ແລະ ກັນມາແຕ່ກ່ອນ. ມາດຕະ - ເກນດັ່ງກ່າວ ສະແດງເຖິງລັກສະນະທີ່ຖືກຕາມກົດເກນຂອງການຂະຫຍາຍຕົວຂອງຄວາມເປັນຈິງ. ຕົວຢ່າງໃນວິວັດທະນາການຂອງຊີວິດເທິງຫນ່ວຍໂລກນີ້ຈຳເປັນຕ້ອງໃຫ້ມີການກຳເນີດຊາດພັນ ແລະ ພືດພັນໃຫມ່. ໃນປະຫວັດສາດ

ຂອງສັງຄົມ ຈຳເປັນຕ້ອງມີການປະຕິວັດທາງສັງຄົມ.

ພ້ອມກັນກັບຄວາມຈຳເປັນແລ້ວ ລັດທິວັດຖຸນິຍົມສັດຈະວິພາກ ຍັງຮັບ ຮູ້ການຄົງຢູ່ຂອງຄວາມບັງເອີນ ແລະ ຄວາມໝາຍທີ່ເປັນທາດແທ້ຂອງມັນ ໃນຂະບວນວິວັດຂອງການຂະຫຍາຍຕົວ. ເພື່ອເຂົ້າໃຈຢ່າງຖືກຕ້ອງຄວາມ ບັງເອີນ ຕ້ອງຊີ້ແຈງບັນດາຈຸດພິເສດທີ່ເປັນລັກສະນະສະເພາະຂອງມັນ. ກ່ອນອື່ນໝົດ ບັນດາປະກົດການບັງເອີນມີເຫດຂອງຕົນເອງ. ຈະຄິດວ່າ ຄວາມບັງເອີນ ແລະ ການບໍ່ມີເຫດຜົນແມ່ນອັນດຽວກັນນັ້ນບໍ່ຖືກຕ້ອງ. ອັນນີ້ ແມ່ນຄວາມຜິດພາດທີ່ເປັນລັກສະນະພິເສດຂອງຈິດສຳນຶກແບບສາມັນ ແລະ ອະພິທຳ. ເວົ້າລວມແລ້ວ ແມ່ນບໍ່ມີປະກົດການທີ່ບໍ່ມີເຫດຜົນ. ຄວາມບັງເອີນແມ່ນພາວະວິໄສ. ການຄົງຢູ່ຂອງມັນ ບໍ່ຂຶ້ນກັບວ່າຮູ້ຈັກເຫດຂອງມັນຫລືບໍ່. ການບໍ່ຮັບຮູ້ ລັກສະນະພາວະວິໄສຂອງຄວາມບັງເອີນ ໝາຍຄວາມວ່າ ການປະຕິເສດມັນໃນຕົວຈິງນັ້ນ, ນຳໄປເຖິງການສັບປົນ ເຫດການທີ່ສຳຄັນແລະບໍ່ ສຳຄັນ, ແລະ ເວົ້າສະເພາະແລ້ວ ນຳເອົາຄວາມສັບສົນປົນເປເຂົ້າໃນ ຄວາມເຂົ້າໃຈກ່ຽວກັບປະຫວັດສາດຂອງສັງຄົມ, ເຊິ່ງໃນສະພາວະການດັ່ງນີ້ ມີລັກສະນະເປັນຕາຍແລະງົມງວາຍ.

ຄວາມບັງເອີນແມ່ນຫຽບຖານ. ບໍ່ມີປະກົດການບັງເອີນທີ່ ເດັດຖານອັນທີ່ຈະບໍ່ພົວພັນກັບຄວາມຈຳເປັນ ແລະ ເປັນຄວາມບັງເອີນໃນທຸກດ້ານ. ປະກົດການອາດຈະແມ່ນຄວາມບັງເອີນ ຖ້າປຽບໃສ່ສາຍພົວພັນແບບຖືກຕາມກົດເກນທີ່ແນ່ນອນເທົ່ານັ້ນ. ຖ້າປຽບໃສ່ສາຍພົວພັນອື່ນ ມັນແມ່ນຄວາມຈຳເປັນ.ເຊັ່ນເປັນຄວາມບັງເອີນທີ່ນັກປາດຜູ້ໃດໜຶ່ງຈະເປັນຜູ້ຄົ້ນຄົບອັນນີ້ ຫລືອັນນັ້ນ. ແຕ່ໃນການຂະຫຍາຍຕົວທາງດ້ານວິທະຍາສາດ ເວົ້າລວມແລ້ວ ການຄົ້ນພົບແມ່ນອັນຈຳເປັນ.

ຄວາມບັງເອີນມັກເກີດຂຶ້ນໃນການປະສົມປະສານສອງຫລືຫລາຍສາຍພົວພັນທີ່ຈຳເປັນ. ຕົວຢ່າງ ຖ້າຫາກຕົ້ນໄມ້ລົ້ມລົງຍ້ອນຖືກລົມພາຍຸ ແມ່ນວ່າ ລົມແຮງກະທົບໃສ່ຕົ້ນໄມ້ນັ້ນແມ່ນຄວາມບັງເອີນ ເພາະມັນບໍ່ເກີດຂຶ້ນມາຈາກທາດແທ້ຂອງມັນ ດ້ວຍຄວາມຈຳເປັນ. ຕໍ່ບັນດາປັດໄຈດ້ານອຸຕຸນິຍົມແລ້ວ ລົມແມ່ນສິ່ງຈຳເປັນ ເພາະມັນເກີດຂຶ້ນມາຍ້ອນມີກົດເກນການກະທົບຂອງບັນດາປັດໄຈດັ່ງກ່າວ. ໃນຈຸດພົບກັນລະຫວ່າງສອງຂະບວນວິວັດທີ່ຈຳເປັນດັ່ງກ່າວເຊັ່ນລົມ

ແລະ ຊີວິດຂອງຕົ້ນໄມ້ນັ້ນໄດ້ເກີດມີຄວາມບັງເອີນ. ດັ່ງນີ້ ຄວາມບັງເອີນ - ແມ່ນສິ່ງພາຍນອກ ຖ້າປຽບໃສ່ປະກົດການຫລືຂະບວນວິວັດໜຶ່ງ ທີ່ບໍ່ແມ່ນເກີດຂຶ້ນຈາກທາດແທ້ຂອງມັນ ແຕ່ຍ້ອນສາຍພົວພັນອື່ນ ຫລືສາຍພົວພັນທີ່ບໍ່ເປັນທາດແທ້ ແລະ ດ້ວຍເຫດນັ້ນ ສຳລັບມັນແລ້ວ ຄວາມບັງເອີນນີ້ອາດຈະເປັນໄປໄດ້ແຕ່ບໍ່ແມ່ນຢ່າງຂາດຕົວ ການບັງເອີນສາມາດຈະເກີດຂຶ້ນ ທັງສາມາດຈະ ບໍ່ເກີດຂຶ້ນ.

ໃນຈົດໝາຍສະບັບໜຶ່ງ[໑)] ຟ.ອັງແກນ ໄດ້ສະເໜີຄວາມຄິດທີ່ອະທິບາຍດ້ານທີ່ສຳຄັນອີກດ້ານໜຶ່ງ ຂອງສາຍພົວພັນເຊິ່ງກັນ ແລະ ກັນ ລະຫວ່າງ - ຄວາມຈຳເປັນ ແລະ ຄວາມບັງເອີນ. ຄວາມບັງເອີນ ແມ່ນການເພີ່ມຕື່ມແລະຮູບແບບການສະແດງຕົວຂອງຄວາມຈຳເປັນ. ໃນໂລກພາວະວິໄສ ບໍ່ມີຄວາມຈຳເປັນ "ລ້ວນໆ" ແລະ ກໍບໍ່ອາດຈະມີຖາທາກວ່າບໍ່ມີຄວາມບັງເອີນ. ມັນປະກົດຕົວຂຶ້ນມາໂດຍໄຂທາງໃຫ້ຕົນຜ່ານຄວາມບັງເອີນຫລາຍປະການ ໃນຖານະເປັນສິ່ງສະເລ່ຍໝັ້ນທ່ຽງ ແລະ ຊ້ຳຮອຍ. ການຂະຫຍາຍຕົວທາງສັງຄົມປະກອບດ້ວຍການເຄື່ອນໄຫວຂອງຄົນຈຳນວນຫລວງຫລາຍ, ທີ່ມີຄວາມພະຍາຍາມ, ຈຸດປະສົງ ແລະ ຫລັກໝັ້ນທີ່ແຕກຕ່າງກັນທີ່ສຸດ. ການພົບກັນ, ການປະທະກັນ, ການປະສານກັນລະຫວ່າງໝົດທຸກຄວາມພະຍາຍາມດັ່ງກ່າວ ໃນຜົນສຸດທ້າຍໄດ້ນຳໄປເຖິງແນວທາງ ຂະຫຍາຍຕົວອັນແນ່ນອນ ເຊິ່ງມີລັກສະນະຈຳເປັນ ແລະ ບ່ອນໃດ...ທີ່ຢູ່ເທິງໜ້າພຽງນັ້ນ ມີຄວາມບັງເອີນ ແລ້ວແມ່ນວ່າຢູ່ບ່ອນນັ້ນ ຄວາມບັງເອີນນີ້ເອງເວລາໃດກໍເກີດມີຂຶ້ນມາຕາມກົດເກນພາຍໃນ ແລະ ເລິກລັບ "[໒)].

ຄວາມບັງເອີນບໍ່ພຽງແຕ່ເພີ່ມຕື່ມໃຫ້ແກ່ຄວາມຈຳເປັນເທົ່ານັ້ນ, ແຕ່ ຍັງແມ່ນຮູບແບບການສະແດງຕົວຂອງມັນ. ຂະບວນວິວັດທີ່ຈຳເປັນເຊັ່ນການແຜ່ຂະຫຍາຍຂອງພືດປ່ານັ້ນ ສະແດງຕົວອອກໃນຮູບແບບຂອງຄວາມບັງເອີນຫຼາຍປະການ: ຄືແນວຂອງມັນຈະຕົກລົງດິນຍາມໃດ ແລະ ຢູ່ໃສ ມັນຈະຕົກ ຢູ່ເງື່ອນໄຂໃດ ແລະ ອື່ນໆ. ການປະຕິບັດປະກົດການສັງຄົມທີ່ຖືກຕ້ອງ ຕາມ

---

໑) ເບິ່ງ ກ.ມາກ.ແລະ ຟ.ອັງແກນ ປະມວນບົດນິພົນເຫລັ້ມ໓໙,ໜ້າ໑໗໕

໒) ກ.ມາກ ແລະ ຟ.ອັງແກນ ປະມວນບົດນິພົນ,ເຫລັ້ມ ໒໑, ໜ້າ ໓໐໖

ກົດເກນ ເຊັ່ນຕົວຢ່າງ ການປະຕິວັດທາງສັງຄົມນັ້ນ ແມ່ນພົວພັນກັບຫລາຍພາວະການບັງເອີນ ເຊັ່ນສະຖານທີ່ ແລະ ເວລາຂອງເຫດການນັ້ນຫລືເຫດ ການນັ້ນ, ຜູ້ຄົນທີ່ນຳພາຂະບວນການ ແລະ ອື່ນໆ. ສະພາວະການດັ່ງກ່າວ ເປັນຄວາມບັງເອີນຖ້າປຽບໃສ່ຂະບວນວິວັດປະຫວັດສາດ ແຕ່ເຫດການທີ່ ຈຳເປັນດຳເນີນໄປກໍ່ຜ່ານສະພາວະການເຫລົ່ານັ້ນເອງ. ອັນທີ່ເປັນຄວາມບັງເອີນ ໃນໄລຍະເວລາທີ່ແນ່ນອນ ແລະ ໃນເງື່ອນໄຂທີ່ແນ່ນອນນັ້ນ ໃນເວລາອື່ນ ແລະ ໃນເງື່ອນໄຂອື່ນ ສາມາດຈະກາຍເປັນຄວາມຈຳເປັນ. ກົງກັນຂ້າມ ອັນ ທີ່ເປັນຄວາມຈຳເປັນໃນອະດີດສາມາດຈະກາຍເປັນຄວາມບັງເອີນ.

ວິທະຍາສາດບໍ່ເບິ່ງຂ້າມຄວາມບັງເອີນ ແຕ່ຊ້ຳພັດຄົ້ນຄວ້າມັນເພື່ອ ຄາດຄະເນຄວາມອາດສາມາດຂອງຄວາມບັງເອີນ ແລະ ສະກັດກັ້ນ, ຈຳກັດ ຫລືຫມູນໃຊ້ຄວາມບັງເອີນດັ່ງກ່າວ. ແຕ່ອັນສຳຄັນຢູ່ບ່ອນວ່າ ຜ່ານບັນດາ ຄວາມບັງເອີນຕ້ອງຊອກເຫັນກົດເກນ, ຮັບຮູ້ຄວາມຈຳເປັນ.

ໃນສັງຄົມສັງຄົມນິຍົມ ເຊິ່ງການຂະຫຍາຍຕົວດຳເນີນໄປຢ່າງມີແຜນການນັ້ນ ມີເງື່ອນໄຂສະດວກໃນການຈຳກັດພົນກະທົບຂອງຄວາມບັງເອີນ ທີ່ບໍ່ເປັນສິ່ງປາດຖະຫນານັ້ນໄດ້ຢ່າງຫລວງຫລາຍ.

24 / VII

## ກ. ເນື້ອໃນແລະຮູບແບບ

ສິ່ງວັດຖຸ ແລະ ປະກົດການມີດ້ານທີ່ແຕກຕ່າງກັນ. ຫນຶ່ງໃນຈຳນວນດ້ານດັ່ງກ່າວ ແມ່ນເນື້ອໃນ ແລະ ຮູບແບບ. ແຕ່ລະສິ່ງວັດຖຸຫລືປະກົດການລ້ວນແຕ່ມີເນື້ອໃນແລະຮູບແບບຂອງຕົນ ທີ່ເປັນຄູ່ສິ່ງກົງກັນຂ້າມກັນ. ສິ່ງດັ່ງກ່າວ - ແມ່ນຫຍັງແທ້ ?

ການລວບລວມສ່ວນປະກອບ* ແລະ ຂະບວນວິວັດຂອງສິ່ງວັດຖຸຫນຶ່ງ ອັນທີ່ປະກອບເປັນສິ່ງວັດຖຸນັ້ນ ຮຽກເປັນເນື້ອໃນ. ເນື້ອໃນຂອງປະລະມານູ ແມ່ນ

---

* ສ່ວນປະກອບແມ່ນແຕ່ລະສິ່ງວັດຖຸ, ລັກສະນະສະເພາະ ແລະ ຂະບວນ ວິວັດທີ່ປະກອບເປັນສິ່ງວັດຖຸໃຫມ່, ລະບົບໃຫມ່.

ເມັດພື້ນຖານ ເຊິ່ງປະກອບກັນເຂົ້າເປັນປະລະມານູ ແລະ ຂະບວນວິວັດທີ່ດຳເນີນພາຍໃນປະລະມານູ. ເນື້ອໃນຂອງວຽກງານສິລະປະ ປະກອບດ້ວຍສິ່ງທີ່ເປັນຄວາມຈິງ, ຊີວິດຂອງຄົນ.

ໂຄງຮ່າງ * ພາຍໃນແລະພາຍນອກ,ວິທີຄົງຢູ່ຂອງເນື້ອໃນນັ້ນ ແມ່ນຮູບແບບ. ມັນແມ່ນໂຄງປະກອບຂອງເນື້ອໃນ, ແມ່ນການຈັດຕັ້ງອັນແນ່ນອນຂອງສ່ວນປະກອບ ແລະ ພາກສ່ວນຂອງມັນ ໃນກາລະເວລາ ແລະ ໃນກາງຫາວ, ແມ່ນສາຍພົວພັນກັນລະຫວ່າງພວກມັນ. ລຳດັບຈັດວາງອັນແນ່ນອນຂອງ ເມັດພື້ນຖານຢູ່ໃນປະລະມານູນັ້ນ ແມ່ນຮູບແບບຂອງມັນ. ໃນບົດປະພັນວັນນະຄະດີ ຮູບແບບແມ່ນການຈັດຕັ້ງພາຍໃນຂອງມັນ ທີ່ເປັນການສະແດງຕົວຂອງເນື້ອໃນ ແລະ ແມ່ນພາຫະນະວາດພາບເຊັ່ນການພັນລະນາ, ພາສາ, ໂຄງເລື່ອງ - ແລະ ອື່ນໆ.

ເນື້ອໃນ ແລະ ຮູບແບບປະກອບເປັນດ້ານທີ່ຕັດຂາດອອກຈາກກັນ ບໍ່ໄດ້ຂອງສິ່ງວັດຖຸ, ມັນຢູ່ໃນຄວາມເປັນເອກະພາບ ແລະ ພົວພັນນຳກັນ ຢ່າງ-ແໜ້ນແຟ້ນ. ເນື້ອໃນແມ່ນດ້ານທີ່ມີລັກສະນະຕັດສິນຂອງສິ່ງວັດຖຸ. ມັນສ້າງເງື່ອນໄຂໃຫ້ແກ່ຮູບແບບ. ຮູບແບບສອດຄ່ອງກັບເນື້ອໃນ, ໝາຍຄວາມ ວ່າເນື້ອໃນເປັນແນວໃດ ຮູບແບບກໍຈະເປັນແນວນັ້ນໃນທີ່ສຸດ. ການທີ່ຮູບ ແບບສອດຄ່ອງກັບເນື້ອໃນນັ້ນ ເປັນເງື່ອນໄຂທີ່ສຳຄັນສຳລັບການຂະຫຍາຍຕົວແບບທຳມະດາຂອງບັນດາສິ່ງວັດຖຸ ແລະ ຂະບວນວິວັດ. ໂລກຂອງພືດພັນ ແລະ ສັດໄດ້ເຜີຍໃຫ້ເຫັນ ເຫດການຕົວຈິງຈຳນວນຫລວງຫລາຍ ຂອງການ ສອດຄ່ອງກັນ ລະຫວ່າງຮູບແບບ ແລະ ເນື້ອໃນ, ແຕ່ລະສິ່ງທີ່ມີຊີວິດ ເວົ້າລວມ, ອະໄວຍະວະຂອງມັນລ້ວນແຕ່ປະກອບຂຶ້ນມາ ເພື່ອເຮັດໃຫ້ການດຳເນີນ ຊີວິດຂອງມັນເປັນໄປຢ່າງເໝາະສົມທີ່ສຸດ. ຈຸດພິເສດຂອງວຽກງານສິລະປະທີ່ແທ້ຈິງນັ້ນຄືການທີ່ຮູບແບບສອດຄ່ອງກັບເນື້ອໃນ ເຊິ່ງສະແດງເຖິງເນື້ອໃນ ຂອງ

---

* ໂຄງຮ່າງແມ່ນທີ່ຕັ້ງ, ຖານະບົດບາດ ແລະ ການພົວພັນຂອງສ່ວນປະກອບທີ່ຄົບຖ້ວນ, ຂອງລະບົບເວົ້າໃຫ້ງ່າຍແດ່ໜ້ອຍໜຶ່ງ,ອັນນີ້ແມ່ນໂຄງປະກອບ, ແມ່ນການຈັດຕັ້ງ. ລະບົບແມ່ນຄວາມເປັນເອກະພາບລະຫວ່າງສ່ວນປະ ກອບ ແລະ ໂຄງປະກອບ.

ວຽກງານດັ່ງກ່າວຢ່າງຄົບຖ້ວນ ແລະ ໃສແຈ້ງທີ່ສຸດ.

ລັກສະນະນັກປ່ຽນແປງຂອງປະກົດການໃນທຳມະຊາດ ແລະ ສັງຄົມເຮັດໃຫ້ຄວາມສອດຄ່ອງຢ່າງຄົບຖ້ວນ ແລະ ເດັດຖານລະຫວ່າງຮູບແບບ ແລະ -ເນື້ອໃນນັ້ນເປັນໄປບໍ່ໄດ້. ມັນສອດຄ່ອງກັນໃນພື້ນຖານ ໃນອັນລວມ. ຄວາມອັດແຍ່ງອັນແນ່ນອນລະຫວ່າງຮູບແບບ ແລະ ເນື້ອໃນນັ້ນແມ່ນຍອນຮູບແບບໄປນຳຫລັງເນື້ອໃນ ເນື່ອງຈາກວ່າຮູບແບບຂັ້ນກັບສິ່ງອື່ນ ມັນຈຶ່ງປ່ຽນແປງ ໄປຕາມຫລັງການປ່ຽນແປງຂອງເນື້ອໃນ.

ຮູບແບບມີລັກສະນະຕັ້ງໜ້າ, ເມື່ອປະກອບຂຶ້ນມາໂດຍຂຶ້ນກັບ ເນື້ອໃນ-ແລ້ວ, ມັນມີຄວາມເປັນເອກະລາດຢ່າງທຽບຖານ ແລະ ກະທົບຕໍ່ເນື້ອໃນ . ການກະທົບດັ່ງກ່າວເປັນແບບສອງຂັ້ນ: ຮູບແບບທີ່ສອດຄ່ອງກັບເນື້ອໃນນັ້ນຊຸກຍູ້ການຂະຫຍາຍຕົວຂອງມັນ ສ່ວນຮູບແບບທີ່ບໍ່ສອດຄ່ອງ, ທີ່ຫລ້າຫລັງ ແລະ ກ້າວບໍ່ທັນເນື້ອໃນນັ້ນ ຊ້ຳພັດຖ່ວງດຶງການຂະຫຍາຍຕົວຂອງມັນ. ການທີ່ ຮູບແບບກ້າວບໍ່ທັນນັ້ນແມ່ນຍ້ອນມັນມີລັກສະນະໝັ້ນທ່ຽງກວ່າ, ບໍ່ມີ ລັກສະນະເຄື່ອນເໜັງຄືເນື້ອໃນ. ຄວາມອັດແຍ່ງລະຫວ່າງເນື້ອໃນທີ່ຂະຫຍາຍຕົວແລະຮູບແບບທີ່ກ້າວບໍ່ທັນນັ້ນ ເພີ່ມທະວີຂຶ້ນ, ຮ້າຍແຮງຂຶ້ນ ແລະ ກ້າວໄປເຖິງຂັ້ນຕອງປະທະກັນ. ຮູບແບບທີ່ຫລ້າຫລັງໄປແລ້ວນັ້ນ ກາຍເປັນສິ່ງຈຳກັດເນື້ອໃນແລ້ວສະພາບວິກິດການຂອງເປົ້າໝາຍໄດ້ເກີດຂຶ້ນມາ.

ໃນພົນສຸດທ້າຍ ເນື່ອງຈາກວ່າເນື້ອໃນຈຳເປັນຕ້ອງຂະຫຍາຍຕົວ ມັນຈຶ່ງທັບມ້າງຮູບແບບເກົ່າ ແລະ ສ້າງຮູບແບບໃໝ່ທີ່ສອດຄ່ອງນັ້ນຂຶ້ນມາ. ດັ່ງ ນີ້ຂອງການປະທະກັນດັ່ງກ່າວນີ້ໄດ້ຮັບການແກ້ໄຂ ແລະ ວິກິດການໃນການ ຂະຫຍາຍຕົວຂອງເປົ້າ ໝາຍກໍ່ຖືກແກ້ຕົກໄປ. ຮູບແບບໃໝ່ສ້າງເງື່ອນໄຂ ອັນສະດວກໃຫ້ແກ່ການປະຕິບັດຂອງເນື້ອໃນ ແລະ ຊຸກຍູ້ການຂະຫຍາຍຕົວ ຂອງມັນ ຈົນກະທັ້ງມັນຈະບໍ່ຫລ້າຫລັງໄປອີກໃນເທື່ອໃໝ່. ການກະທົບເຊິ່ງ ກັນແລະ ກັນລະຫວ່າງຮູບແບບ ແລະ ເນື້ອໃນນັ້ນ ແມ່ນໜຶ່ງໃນຕົ້ນກຳເນີດທີ່ສຳຄັນຂອງການຂະຫຍາຍຕົວ.

ສຳລັບອະພິທຳ ແລະ ລັດທິຈິດຕະນິຍົມແລ້ວ ລັກສະນະພິເສດຂອງ ພວກເຂົາເຈົ້າແມ່ນທັດສະນະແບບດ້ານດຽວຕໍ່ຮູບແບບ ແລະ ເນື້ອໃນ, ການບໍ່ ຮູ້ແລະ ບໍ່ຢາກເຫັນຄວາມເປັນເອກະພາບກັນແບບສັດຈະວິພາກ ແລະ ການກະ

ທົບເຊິ່ງກັນ ແລະ ກັນລະຫວ່າງພວກມັນ. ພວກເຂົາເຈົ້າມັກຕັດແບ່ງຮູບແບບອອກຈາກເນື້ອໃນ ຖືສຳລັບຄວາມເປັນເອກະລາດແບບທຽບຖານຂອງມັນ, ຖືມັນເປັນຄືອັນເອກະລາດຈາກເນື້ອໃນ.

ພາຍໃຕ້ສັງຄົມນິຍົມ ຄວາມອັດແຍ່ງກັນລະຫວ່າງຮູບແບບ ແລະ ເນື້ອໃນນັ້ນ ກາຍເປັນຄວາມອັດແຍ່ງແບບບໍ່ປໍລະປັກກັນ ດ້ວຍເຫດນັ້ນຈຶ່ງເກີດມີຄວາມອາດສາມາດດັດສ້າງຮູບແບບໃຫ້ສອດຄ່ອງກັບເນື້ອໃນທີ່ປ່ຽນແປງນັ້ນຢ່າງ ທັນການແບບທຽບຖານ.

ຄວາມເຂົ້າໃຈແບບຖືກຕ້ອງແລະ ການຄຳນຶງເຖິງສາຍພົວພັນເຊິ່ງກັນ - ແລະ ກັນລະຫວ່າງຮູບແບບ ແລະ ເນື້ອໃນນັ້ນ ມີຄວາມໝາຍອັນໃຫຍ່ຫລວງໃນວຽກງານຕົວຈິງ. ພັກ ມາກ-ເລນິນ ຖືວ່າການດັດສ້າງຢ່າງທັນການ ບັນດາຮູບແບບການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ວັດທະນະທຳ ແລະ ການເຄື່ອນໄຫວຂອງຕົນນັ້ນເປັນສິ່ງທີ່ສຳຄັນ. ພັກເປັນຜູ້ລິເລີ່ມການດຳເນີນການປະຕິຮູບທີ່ສຸກງອມແລ້ວນັ້ນຢ່າງທັນການ, ພັກດັດແກ້ຮູບແບບແລະແບບວິທີເຮັດວຽກຂອງພັກໃຫ້ສົມບູນຂຶ້ນຢູ່ເປັນປະຈຳ ພະຍາຍາມເຮັດໃຫ້ການນຳພາ-ຂອງພັກໃນໝູ່ມະຫາຊົນ, ໃນການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ - ແລະ ວັດທະນະທຳນັ້ນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການທີ່ຂະຫຍາຍ ຕົວຂອງຍຸກສະໄໝກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ.

## ໙. ທາດແທ້ ແລະ ປະກົດການ

ມາດຕະເກນ "ທາດແທ້" ແລະ "ປະກົດການ" ເປັນສິ່ງຈຳເປັນ ສຳລັບຄວາມເຂົ້າໃຈໃຫ້ຖືກຕ້ອງຕໍ່ຂະບວນວິວັດຄວາມຮັບຮູ້. ຄວາມຮັບຮູ້ເລີ່ມ ຈາກສິ່ງທີ່ຄົນເຮົາສາມາດຮູ້ສຶກໂດຍທາງອະໄວຍະສຳຜັດໂດຍກົງ, ເລີ່ມຈາກດ້ານນອກຂອງສິ່ງວັດຖຸ. ດ້ານນອກ, ຄວາມພົວເພີນ ແລະ ການປ່ຽນແປງ ພໍສົມຄວນ ຂອງສິ່ງວັດຖຸ ແລະ ຂະບວນວິວັດແບບນີ້ແມ່ນປະກົດການ. ທາດແທ້ - ແມ່ນດ້ານພາຍໃນ, ແມ່ນດ້ານທີ່ໝັ້ນທ່ຽງທຽບຖານ ແລະ ມີລັກສະນະຕັດສິນມັນຢູ່ເບື້ອງຫລັງຂອງປະກົດການ ແລະ ບໍ່ສາມາດຈະຮູ້ສຶກໂດຍທາງອະໄວຍະ

ວະສຳຜັດ. ມັນແມ່ນພື້ນຖານຂອງວັດຖຸ, ແມ່ນອັນສຳຄັນໃນເນື້ອໃນຂອງມັນ.

ທາດແທ້ ແລະ ປະກົດການແມ່ນດ້ານທີ່ແຕກຕ່າງກັນ ແລະ ກົງກັນຂ້າມ-ກັນຂອງສິ່ງວັດຖຸ. ຕາມທຳມະດາແລ້ວ ທາດແທ້ສະແດງຕົວເປັນອັນລວມແລະປະກົດການ ເປັນອັນສະເພາະ, ອັນເອກະເທດ. ດ້ວຍເຫດນັ້ນ ທາດແທ້ອາດຈະສະແດງອອກໃນຫລາຍປະກົດການ ຕົວຢ່າງຄືສຽງອາດຈະແຕກຕ່າງກັນແຕ່ທາດແທ້ຂອງມັນອັນດຽວ ແມ່ນການສະເທືອນຂອງອາກາດ. ທຸກສິ່ງທີ່ມີ ຊີວິດລ້ວນແຕ່ມີທາດແທ້ລວມຄືການແລກປ່ຽນທາດ. ຫມາຍຄວາມວ່າທາດແທ້ ແມ່ນອັນລວມ ແລະ ພ້ອມກັນນັ້ນແມ່ນອັນພື້ນຖານ, ອັນທີ່ເປັນລັກສະນະສະເພາະ-ຂອງປະເພດອັນແນ່ນອນຂອງ ສິ່ງວັດຖຸ. ສ່ວນປະກອບບານຊ້ຳຄືນເກົ່າ, ແມ່ນອັນສະເພາະ.

ທາດແທ້ ແລະ ປະກົດການແມ່ນດ້ານທີ່ຈຳເປັນຂອງທຸກສິ່ງວັດຖຸ ຫລື ຂະບວນວິວັດ ແລະ ຢູ່ໃນຄວາມເປັນເອກະພາບ ແລະ ສາຍພົວພັນເຊິ່ງກັນແລະກັນ. ບໍ່ມີປະກົດການໂດຍປາສະຈາກທາດແທ້ ແລະ ກໍບໍ່ມີທາດແທ້ໂດຍປາສະຈາກການສະແດງຕົວອອກຂອງປະກົດການເຊັ່ນດຽວກັນ. ໃນສາຍພົວພັນເຊິ່ງກັນ ແລະ ກັນແບບນີ້ ທາດແທ້ແມ່ນດ້ານພື້ນຖານ, ດ້ານທີ່ມີລັກສະນະຕັດສິນ-ຂອງສິ່ງວັດຖຸ ແລະ ການປ່ຽນແປງທາດແທ້ນັ້ນສ້າງເງື່ອນໄຂໃຫ້ແກ່ການປ່ຽນແປງຂອງປະກົດການ. ພ້ອມກັນນັ້ນ ແມ່ນຢູ່ໃນການປ່ຽນແປງຂອງປະກົດການນັ້ນເອງ ຈຶ່ງສາມາດສັງເກດເຫັນທາດແທ້ ແລະ ການປ່ຽນແປງຂອງມັນ.ປະກົດການແມ່ນການສະແດງລັກສະນະພາຍນອກຂອງທາດແທ້. ໃນຄວາມຈິງ -ແລ້ວ ບໍ່ມີທາດແທ້ທີ່ລ້ວງຢູ່ຕາມລຳພັງ, ທີ່ບໍ່ສະແດງອອກໃນລັກສະນະສະເພາະໃດຫນຶ່ງ, ໃນປະກົດການໃດຫນຶ່ງ ແລະ ອື່ນໆ. ທາດແທ້ເວົ້າລວມ, ໃນຖານະເປັນອັນລວມແລ້ວ ບໍ່ສາມາດລ້ວງຢູ່ນອກຕົວ ຈາກອັນຕ່າງຫາກ ແລະ ສະແດງຕົວອອກພຽງແຕ່ຜ່ານດ້ານນອກຂອງອັນຕ່າງຫາກເທົ່ານັ້ນ.

ລັດທິຈິດຕະນິຍົມອະທິບາຍມາດຕະຖານທາດແທ້ ແລະ ປະກົດການຢ່າງບໍ່ຖືກຕ້ອງ ແລະ ບິດເບືອນ. ຖ້າຫາກລັດທິວັດຖຸນິຍົມຖືວ່າທາດແທ້ ແລະປະກົດການແມ່ນການສ່ອງແສງເຖິງດ້ານທີ່ແນ່ນອນຂອງຄວາມເປັນຈິງ ພາວະວິ ໄສແລ້ວ, ສ່ວນພວກນັກຈິດຕະນິຍົມພາວະວິໄສຊ້ຳພັດຢັ້ງຢືນວ່າ ວິນຍານ ເດັດຖານ, ພະເຈົ້າເປັນຜູ້ປະກອບທາດແທ້ຂອງທຸກໆສິ່ງວັດຖຸ. ນັກຈິດຕະນິຍົມອັດ

ຕະວິໄສນຳເອົາປະກົດການເຂົ້າແຕ່ໃນຂົງເຂດຈິດສຳນຶກ ແລະ ຖືວ່າ ມັນຖືກຕັດຂາດ ຈາກສິ່ງວັດຖຸ ແລະ ຂະບວນວິວັດຂອງຄວາມເປັນຈິງ, ຈາກທາດແທ້ຂອງມັນ. ປະກົດວ່າທາດແທ້ແມ່ນສິ່ງທີ່ຮັບຮູ້ບໍ່ໄດ້, ກົງກັນຂ້າມກັບອັນນີ້ ລັດທິວັດຖຸນິຍົມສັດຈະວິພາກປົກປ້ອງທັດສະນະທີ່ຢັ້ງຢືນຄວາມສາມາດຮັບຮູ້ສິ່ງວັດຖຸ ແລະທາດແທ້ຂອງມັນ, ອັນທີ່ໄດ້ຮັບການພິສູດຈາກຊີວິດ ແລະ ພຶດຕິກຳ ຕົວຈິງ.

ທາດແທ້ ແລະ ປະກົດການບໍ່ກົງກັນ. ຖ້າມັນຕາກົງກັນແລ້ວ, ແມ່ນວ່າວິທະຍາສາດຈະກາຍເປັນສິ່ງທີ່ບໍ່ຈຳເປັນ ແລະ ຄວາມຮັບຮູ້ກໍ່ຈະບໍ່ແມ່ນ ຂະບວນວິວັດທີ່ຫຍຸ້ງຍາກ ແລະ ຍາວນານດັ່ງນີ້. ແຕ່ທາດແທ້ ແລະ ປະກົດການພົວພັນ ກັນຢ່າງຖືກຕ້ອງຕາມກົດເກນ ທາດແທ້ສະແດງຕົວອອກໃນປະກົດການຕ່າງໆ ແລະ ດ້ວຍເຫດນັ້ນຈິ່ງສາມາດຮັບຮູ້ໄດ້. ເພື່ອຈູດປະສົງນີ້ ບໍ່ພຽງພໍທີ່ຈະມີແຕ່ຄວາມຮູ້ສຶກອັນງ່າຍດາຍໂດຍທາງອະໄວຍະວະສຳຜັດເທົ່ານັ້ນ.ຄວາມຮັບຮູ້ບັນລຸເຖິງຈິນຕະນາການນາມມະທຳ ແບບຕັກກະສາດ. ຈິນຕະນາການບໍ່ສາມາດຈະເປີດເຜີຍທາດແທ້ໂດຍກົງໄດ້ເຊັ່ນດຽວກັນ. ໜ້າທີ່ຂອງຄວາມຮັບຮູ້ແມ່ນການໄຈ້ແຍກແບບມີຕັກກະສາດຫລັກຖານຂອງຄວາມຮູ້ສຶກທາງອະໄວຍະວະສຳຜັດ ແລະ ບົນພື້ນຖານນີ້ມັນສາມາດສະຫລຸບຜົນກ່ຽວກັບທາດແທ້ຂອງປະກົດການ ຫລືຂະບວນວິວັດ. ເຊັ່ນຄວາມຮັບຮູ້ທາດແທ້ຂອງຊີວິດທີ່ປະກອບຢູ່ໃນການແລກປ່ຽນທາດນັ້ນເປັນໄປໄດ້ຍ້ອນການໄຈ້ແຍກການສະແດງຕົວອອກ ມາຂອງມັນ ເຊັ່ນການກິນ, ການເຕີບໃຫຍ່, ການແຜ່ຂະຫຍາຍ, ການສະທ້ອນຕໍ່ການສະທົບ. ນິດໄສໃຈຄໍຂອງຄົນກໍສະແດງຕົວອອກໂດຍຜ່ານການໄຈ້ ແຍກການປະພຶດຕົວຢ່າງມີຕັກກະສາດ ແລະ ການກະທຳຂອງເຂົາ.

ທາດແທ້ ແລະ ກົດເກນແມ່ນຄວາມຮູ້ທີ່ໃກ້ຄຽງກັນທີ່ສຸດ ແລະ ມີ ລຳດັບດຽວກັນ. ເພາະວ່າກົດເກນ ແມ່ນສາຍພົວພັນທີ່ເປັນທາດແທ້ຢູ່ພາຍໃນ ມີລັກສະນະຕັດສິນ, ແມ່ນສາຍພົວພັນລະຫວ່າງບັນດາທາດແທ້ຫລືພາຍໃນທາດແທ້. ດ້ວຍເຫດນັ້ນ ໃນເມື່ອຮັບຮູ້ທາດແທ້ ຄົນເຮົາຄົ້ນພົບທັງກົດເກນທີ່ຄອບຄອງຂະບວນວິວັດນີ້ຫລືຂະບວນວິວັດນັ້ນ.

ເສັ້ນທາງຄວາມຮັບຮູ້ ເວລາໃດກໍ່ແມ່ນການເຄື່ອນເໜັງຈາກດ້ານ ນອກຂອງສິ່ງວັດຖຸໄປເຖິງສາຍພົວພັນທີ່ຖືກຕ້ອງຕາມກົດເກນຢ່າງເລິກເຊິ່ງ ໝາຍ

ຄວາມວ່າ ຈາກປະກົດການໄປເຖິງທາດແທ້. ຫາກແຕ່ທາດແທ້ບໍ່ແມ່ນຈະຮັບຮູ້ໄດ້ໝົດໃນທັນໃດໂລດ, ເນື່ອງຈາກວ່າ ມັນບໍ່ມີຍາມຈະສຸດສ້ຽງຈັກເທື່ອ. ດ້ວຍເຫດນັ້ນ ເມື່ອເປີດເຜີຍດ້ານໜຶ່ງຂອງທາດແທ້ແລ້ວ ຄວາມຮັບຮູ້ບໍ່ ຢຸດຕິລົງ ແຕ່ດຳເນີນຕໍ່ໄປ ດັ່ງທີ່ເວົ້າກັນວ່າ ຈາກທາດແທ້ລຳດັບທີໜຶ່ງ ກ້າວໄປສູ່ທາດແທ້ ລຳດັບທີສອງ ເຊິ່ງແມ່ນທາດແທ້ທີ່ເລິກເຊິ່ງກວ່າ ແລະ ດັ່ງນີ້ຕໍ່ໄປບໍ່ມີວັນສິ້ນສຸດ.

ເພື່ອເປັນຕົວຢ່າງ ເຮົາສາມາດໄຈ້ແຍກເບິ່ງການທີ່ຄົນຮັບຮູ້ໂຄງປະກອບຂອງລະບົບຕາເວັນ. ເມື່ອ ເຫັນວ່າ ຕາເວັນເຄື່ອນຍ້າຍອ້ອມໜ່ວຍໂລກ - ແລ້ວ ມັນເປັນໄລຍະຍາວນານທີ່ຄົນເຮົາຄິດວ່າ ມັນເປັນດັ່ງນີ້ແທ້. ແຕ່ອັນນີ້ພຽງແຕ່ແມ່ນການເຫັນໃນຮູບນອກເທົ່ານັ້ນ ໝາຍຄວາມວ່າ ມັນແມ່ນ ປະກົດການທີ່ບິດເບືອນທາດແທ້. ຢ່າງໃດກໍຕາມ ລະບົບຂອງປະໂຕໂລເມ ທີ່ຖືວ່າ-ໜ່ວຍໂລກຕັ້ງຢູ່ໃຈກາງນັ້ນ ເປັນລະບົບທີ່ຄອບງຳຢູ່ໃນວິຊາດາລາສາດ ມາເປັນເວລາດົນນານ. ລະບົບດັ່ງກ່າວຢັ້ງຢືນວ່າ ໜ່ວຍໂລກຕັ້ງຢູ່ໃຈກາງຂອງລະບົບຈັກກະວານ. ໃນສະຕະວັດທີ ໑໖ ນ.ໂກແປັກນິກ ໄດ້ຄົ້ນພົບລະບົບ - ໂລກທີ່ຖືວ່າ ຕາເວັນຕັ້ງຢູ່ໃຈກາງ ແລະ ຢັ້ງຢືນວ່າ ຕາເວັນຕັ້ງຢູ່ໃຈ ກາງຂອງຈັກກະວານ ສ່ວນໜ່ວຍໂລກ ແລະ ດວງດາວອື່ນໆໝູນຮອບດວງ ຕາເວັນ ແລະ ປິ່ນອ້ອມແກນຂອງຕົນເອງ. (ພາຍລູນມາ ໄດ້ມີການພິສູດ ຢ່າງຈັດເຈນກວ່າວ່າ ດວງຕາເວັນຕັ້ງຢູ່ໃຈກາງຂອງລະບົບຕາເວັນ, ຫາກບໍ່ແມ່ນໃຈກາງຂອງຈັກກະວານ). ດັ່ງນີ້ເອງມີການຄົ້ນພົບທາດແທ້ລຳດັບທີໜຶ່ງ.

ຕໍ່ມາ ແກັບແລ ໄດ້ວາງກົດເກນການເຄື່ອນເໜັງອ້ອມຕາເວັນຂອງ ບັນດາດວງດາວ ແລະ ນິວເຕີນ ໄດ້ຄົ້ນພົບກົດເກນດຶງດູດຂອງໂລກ ເຊິ່ງເປັນພື້ນຖານສຳລັບກົດເກນແກັບແລ. ມັນແມ່ນກົດເກນລຳດັບທີສອງ. ແຕ່ກົດເກນດຶງດູດໄດ້ພິສູດໂດຍການຕົວຈິງທີ່ສິ່ງວັດຖຸດຶງດູດ ຊຶ່ງກັນແລະກັນ ແຕ່ບໍ່ໄດ້ອະທິບາຍວ່າເປັນຫຍັງມັນຈຶ່ງເປັນແນວນີ້. ທຳມະຊາດຂອງການດຶງດູດຍັງບໍ່ທັນຖືກເປີດເຜີຍເທື່ອ, ຍັງແມ່ນບັນຫາທີ່ສຳຄັນທີ່ສຸດຂອງວັດຖຸວິທະຍາສະໄໝໃໝ່. ການແກ້ໄຂບັນຫາດັ່ງກ່າວຈະແມ່ນການຄົ້ນພົບທາດແທ້ລຳດັບທີສາມ.

ການໄຈ້ແຍກຢ່າງເຄັ່ງຄັດ ລະຫວ່າງປະກົດການ ແລະ ທາດແທ້ຂອງ-ຂະບວນວິວັດ ແບບພາວະວິໄສ ການຮູ້ຈັກຊອກເຫັນທາດແທ້ທີ່ເຊື່ອງຊອນ ຢູ່

ເບື້ອງຫລັງຂອງປະກົດການນັ້ນ ມີຄວາມໝາຍສຳຄັນສຳລັບວຽກງານ ຕົວຈິງທຸກໆປະເພດ.

## ຜ. ຄວາມອາດເປັນໄປໄດ້ ແລະ ຄວາມເປັນຈິງ

ມາດຕະເກນ"ຄວາມອາດເປັນໄປໄດ້" ແລະ "ຄວາມເປັນຈິງ"ຊ່ວຍໃຫ້ເຂົ້າໃຈ ຈຸດພິເສດແຫ່ງການປະກົດຕົວຂອງອັນໃຫມ່ໃນການຂະຫຍາຍຕົວ , ຍັງຊ່ວຍໃຫ້ເຂົ້າໃຈຄວາມຫມາຍຂອງການເຄື່ອນໄຫວທີ່ມີສະຕິຂອງຄົນເພື່ອ - ເຮັດໃຫ້ອັນໃຫມ່ເກີດມີຂຶ້ນມາໃນສັງຄົມ. ອັນນີ້ມັນຢູ່ບ່ອນວ່າ ບັນດາສິ່ງວັດຖຸ- ແລະ ປະກົດການບໍ່ແມ່ນສິ່ງຕະຫລອດການ. ມັນປະກົດຕົວຂຶ້ນມາໃນກາລະເວລາອັນແນ່ນອນ ແລະ ສູນຫາຍໄປໃນກາລະເວລາອັນແນ່ນອນ. ດ້ວຍເຫດນັ້ນ ທ່າມກາງການຂະຫຍາຍຕົວ ຈຶ່ງມີໄລຍະໃດຫນຶ່ງດັ່ງນີ້, ໃນເມື່ອອັນໃຫມ່ບໍ່ທັນມີເທື່ອ, ມັນບໍ່ທັນປະກົດຕົວຂຶ້ນມາເທື່ອ, ແຕ່ເງື່ອນໄຂແລະປະຖົມປັດໄຈ ສຳລັບການປະກົດຕົວຂອງມັນໄດ້ມີແລ້ວ, ໄດ້ກຽມພ້ອມແລ້ວໂດຍການຂະຫຍາຍ-ຕົວທີ່ດຳເນີນໄປກ່ອນຫນ້ານັ້ນ. ການມີພື້ນຖານ ການລວບລວມບັນດາປະຖົມປັດໄຈ ແລະສາຍເຫດແຫ່ງການປະກົດຕົວຂອງສິ່ງໃຫມ່ນັ້ນ ເອີ້ນວ່າ ຄວາມອາດເປັນໄປໄດ້. ມັນສະແດງເຖິງທ່າອຽງແບບພາວະວິໄສຂອງການຂະຫຍາຍຕົວຂອງຄວາມເປັນຈິງ, ສະແດງເຖິງຄວາມສາມາດຂອງມັນຈະເປັນຕົ້ນກຳເນີດຂອງສິ່ງໃຫມ່.

ຄວາມເປັນຈິງ ແມ່ນຄວາມອາດເປັນໄປໄດ້ທີ່ໄດ້ສຳເລັດ ແລະ ປະກົດຜົນເປັນຈິງແລ້ວ. ໃນມາດຕະເກນຄູ່ນີ້ ຄວາມເປັນຈິງຄືການກົງກັນຂ້າມ ກັບຄວາມອາດເປັນໄປໄດ້. ພ້ອມກັນນັ້ນ ຄວາມຮັບຮູ້ກ່ຽວກັບ "ຄວາມເປັນຈິງ" ຍັງໃຊ້ໃນຄວາມຫມາຍທີ່ກວ້າງຂວາງ, ໃນກໍລະນີດັ່ງນີ້ ມັນຫມາຍເຖິງ ທຸກຢ່າງທີ່ຄົງຢູ່.

ຄວາມເປັນຈິງ ແລະ ຄວາມອາດເປັນໄປໄດ້ພົວພັນກັນຢ່າງແຫນ້ນແຟ້ນ. ຄວາມເປັນຈິງເປັນຕົ້ນກຳເນີດຂອງຄວາມອາດເປັນໄດ້ ແຕ່ຄວາມເປັນ ຈິງເອງຊ້ຳພັດແມ່ນຫມາກຜົນຂອງການປະກົດ ຜົນເປັນຈິງຂອງຄວາມອາດ ເປັນ

ໄປໄດ້ໃນອະດີດ. ໃນພຶດຕິກຳຕົວຈິງ ການແຍກຄວາມອາດເປັນໄປໄດ້ ອອກຈາກຄວາມເປັນຈິງ ນຳໄປເຖິງ ຕົກກະວິພາກນາມມະທຳກ່ຽວກັບຄວາມອາດເປັນໄປໄດ້ທີ່ບໍ່ມີມູນຖານ ແລະ ບໍ່ເປັນຈິງ. ການແຍກຄວາມເປັນຈິງ ຈາກຄວາມອາດເປັນໄປໄດ້ນັ້ນ ຈະນຳໄປເຖິງການສູນເສຍແລວທາງອະນາຄົດ - ເຮັດໃຫ້ຄວາມຮູ້ສຶກຕໍ່ສິ່ງໃຫມ່ເສຍຫາຍໄປ.

ຈະຕີລວາດກວາດພຽງຄວາມອາດເປັນໄປໄດ້ ແລະ ຄວາມເປັນຈິງ ກໍ່ບໍ່ໄດ້ເຊັ່ນດຽວກັນ ເນື່ອງຈາກວ່າ ຂະບວນວິວັດທີ່ສັບສົນແຫ່ງການຜັນປ່ຽນຈາກອັນຫນຶ່ງເປັນອີກອັນຫນຶ່ງນັ້ນ ເປັນສິ່ງຍຶດແບ່ງມັນ. ເຊັ່ນຕົວຢ່າງໃນຊີວິດ ສັງຄົມ ການຜັນປ່ຽນດັ່ງກ່າວຮຽກຮ້ອງໃຫ້ມີຄວາມເຄັ່ງຕຶງຢ່າງຈິງຈັງ ມັນພົວພັນກັບການຕໍ່ສູ້ລະຫວ່າງບັນດາກຳລັງທາງສັງຄົມທີ່ແຕກຕ່າງກັນ. ການເຮັດ ໃຫ້ຄວາມອາດເປັນໄປໄດ້ ແລະ ຄວາມເປັນຈິງຫຍັບເຂົ້າໃກ້ຊິດກັນ ເກີນຄວນນັ້ນ ນຳໄປເຖິງຄວາມສະຫງົບຊຸນອຽນ ແລະ ສາມາດຫລຸດຜ່ອນຄວາມ ຫ້າວຫັນຂອງມະຫາຊົນລົງເທົ່ານັ້ນ.

ໃນສັງຄົມ ແລະ ໃນທຳມະຊາດ ຄວາມອາດເປັນໄປໄດ້ຫັນປ່ຽນ ຄວາມເປັນຈິງຢ່າງແຕກຕ່າງກັນ. ສຳລັບເລື່ອງນີ້ໃນທຳມະຊາດຕອງການພຽງ ແຕ່ເງື່ອນໄຂພາວະວິໄສເທົ່ານັ້ນ ກໍ່ພໍແລ້ວ, ຖ້າຫາກຂະບວນວິວັດດັ່ງກ່າວ ດຳເນີນໄປໂດຍປາສະຈາກການກະທົບຂອງຄົນ. ເຊັ່ນ ເພື່ອໃຫ້ແນວພືດພັນ ປ່າອອກຫນໍ່ນັ້ນ ພຽງແຕ່ຕ້ອງການໃຫ້ມັນຕົກລົງດິນທີ່ມີຄວາມຊຸ່ມ ແລະ ອຸນຫະພູມອັນຈຳເປັນ. ໃນສັງຄົມ ການຫັນປ່ຽນດັ່ງນີ້ບໍ່ດຳເນີນໄປຢ່າງອັດຕະໂນມັດແຕ່ຫາກດຳເນີນໄປຍ້ອນການເຄື່ອນໄຫວຂອງຄົນ ທີ່ມີຈິດສຳນຶກ ແລະ ມານະຈິດ ຫມາຍຄວາມວ່າ ຢູ່ນີ້ມີແຕ່ເງື່ອນ ໄຂພາວະວິໄສເທົ່ານັ້ນ ບໍ່ພຽງພໍ. ຍັງ ຈຳເປັນຕ້ອງໃຫ້ມີເງື່ອນໄຂອັດຕະວິໄສຄືຄວາມເຂົ້າໃຈໃນຄວາມຈຳເປັນ ຂອງການຄັດສ້າງ, ຄວາມເດັດດ່ຽວໃນການຍັບຈູການດັດສ້າງດັ່ງກ່າວຢ່າງ ຕັ້ງຫນ້າ, ສະຕິການຈັດຕັ້ງຂອງປະຊາຊົນ ຂອງບັນດາຊົນຊັ້ນ ແລະ ພັກຕ່າງໆ.

ໃນຊີວິດສັງຄົມ ການອົມກັບການ ຫັນປ່ຽນແຕ່ຄວາມອາດເປັນໄປໄດ້ໄປສູ່ຄວາມເປັນຈິງນັ້ນຍັງມີຄວາມຫມາຍສຳຄັນ ຍ້ອນວ່າໃນນັ້ນຄວາມອາດເປັນໄປໄດ້ປະກົດຕົວຂຶ້ນມາພ້ອມກັນ ແລະ ມັນມີການພົວພັນກັບການຄົງຢູ່ຂອງ ກຳລັງ ແລະທ່າອຽງທີ່ແຕກຕ່າງກັນ, ບາງສິ່ງບາງຄາວຍັງເປັນກຳລັງແລະທ່າອຽງທີ່

ແຕກຕ່າງກັນ, ບາງຄັ້ງບາງຄາວຍັງເປັນກຳລັງ ແລະ ທ່າອຽງທີ່ກົງກັນຂ້າມກັນ. ຄວາມອາດເປັນໄປໄດ້ອັນໃດໃນຈຳນວນດັ່ງກ່າວນີ້ ຈະປະກົດເປັນ ຈິງນັ້ນ ກໍ່ນຶກດ້ວຍການກະທົບຂອງກຳລັງເຫລົ່ານີ້, ດ້ວຍການຕໍ່ສູ້ລະຫວ່າງພວກມັນ, ດ້ວຍຜົນຂອງການຕໍ່ສູ້ດັ່ງກ່າວນີ້ເປັນຕົ້ນຕໍ. ສ່ວນກ່ຽວກັບບັນຫາທີ່ວ່າສົງຄາມໂລກຈະເກີດຂຶ້ນຫລືບໍ່ນັ້ນ ສ່ວນຫລາຍຂຶ້ນກັບລັກສະນະການຈັດຕັ້ງ ຄວາມສາມັກຄີ ແລະ ຄວາມເດັດດ່ຽວ ແລະ ລັກສະນະມະຫາຊົນຂອງບັນດາກຳລັງທີ່ຕໍ່ສູ້ເພື່ອສັນຕິພາບ, ຂຶ້ນກັບຂະໜາດ ແລະ ຜົນສຳເລັດຂອງການຕໍ່ສູ້ ຂອງພວກເຂົາເຈົ້າ.

ຄວາມອາດເປັນໄປໄດ້ແບ່ງອອກເປັນແບບແທ້ຈິງ ແລະ ແບບຮູບນອກ . ຄວາມອາດເປັນໄປໄດ້ແບບແທ້ຈິງນັ້ນ ອອກມາຈາກຄວາມຈຳເປັນພາວະວິໄສ ອອກມາຈາກກົດເກນ ແລະ ທ່າອຽງຂອງການຂະຫຍາຍຕົວ. ຄວາມອາດໄປໄດ້ແບບຮູບນອກເກີດຂຶ້ນມາຍ້ອນ ປັດໄຈທີ່ບັງເອີນ ທີ່ບໍ່ເປັນຕົ້ນຕໍ ຖາທຽບໃສ່ທ່າອຽງທີ່ຖືກຕ້ອງຕາມກົດເກນ.

ຄວາມອາດເປັນໄປໄດ້ແບບແທ້ຈິງ ຍັງແບ່ງອອກເປັນແບບນາມມະທຳ - ແລະ ແບບຮູບປະທຳ. ແບບນາມມະທຳ ແມ່ນຄວາມອາດເປັນໄປໄດ້ ເຊິ່ງເຖິງວ່າຈະຖືກຕ້ອງຕາມກົດເກນທຳມະຊາດ ແລະ ສັງຄົມກໍ່ຕາມ ແຕ່ຍັງບໍ່ທັນມີເງື່ອນໄຂທີ່ຈຳເປັນສຳລັບການຫັນປ່ຽນໄປສູ່ຄວາມເປັນຈິງ. ມັນຈະກາຍ - ເປັນແບບຮູບປະທຳ ໃນເມື່ອຫາກມີເງື່ອນໄຂທີ່ຈຳເປັນສຳລັບການປະກົດ ຜົນເປັນຈິງຂອງມັນ. ຫລາຍສິບປີກ່ອນໜ້ານີ້ ຄວາມອາດເປັນໄປໄດ້ທີ່ຄົນຈະບິນຂຶ້ນສູ່ດວງດາວອື່ນໆໃນລະບົບຕາເວັນນັ້ນ ເປັນແບບນາມມະທຳ. ສ່ວນດຽວນີ້ ເນື່ອງຈາກວ່າ ວິທະຍາສາດ ແລະ ເຕັກນິກມີການຂະຫຍາຍຕົວ, ເນື່ອງຈາກວ່າມີຄວາມສຳເລັດໃນການພິຊິດອະວະກາດ, ຄວາມອາດເປັນໄປໄດ້ - ກາຍເປັນຮູບປະທຳ ແລະ ວັນເວລາກໍ່ບໍ່ຢູ່ຫ່າງໄກແລ້ວ ທີ່ການບິນລັກສະນະນີ້ຈະກາຍເປັນຄວາມເປັນຈິງ. ຄວາມແຕກຕ່າງກັນ ລະຫວ່າງຄວາມອາດເປັນໄປໄດ້ແບບນາມມະທຳ ແລະ ແບບຮູບປະທຳນັ້ນ ແມ່ນການທຽບຖາມ ເນື່ອງຈາກວ່າ ຄວາມອາດເປັນໄປໄດ້ແບບນາມມະທຳຕ່າງໆນັ້ນ ຢູ່ໃນໄລຍະ ແຕກຕ່າງກັນຂອງການຫັນປ່ຽນໄປສູ່ແບບຮູບປະທຳ. ຄວາມອາດເປັນໄປໄດ້ ແບບຮູບປະທຳໄດ້ເກີດມີຂຶ້ນມາແລ້ວນັ້ນ ຈຳຕ້ອງປະກົດຜົນເປັນຈິງ ຖ້າບໍ່ດັ່ງນັ້ນມັນ

ອາດຈະຖືກສູນເສຍໄປໄດ້.

ສັງຄົມນິຍົມມີທ່າດີເລີດອັນມະຫາສານເຫນືອທຶນນິຍົມ. ຫນຶ່ງໃນ ຈຳນວນທ່າດີເລີດ ດັ່ງກ່າວ ຢູ່ບ່ອນວ່າ ສັງຄົມນິຍົມບໍ່ພຽງແຕ່ມີຄວາມອາດເປັນໄປໄດ້ໃຫມ່ໃນດ້ານຄຸນນະພາບ ເພື່ອຄວາມກ້າວຫນ້າໃນທຸກໆຂົງເຂດຂອງຊີວິດ ສັງຄົມເທົ່ານັ້ນ ແຕ່ຄວາມອາດເປັນໄປໄດ້ເຫລົ່ານີ້ຍັງແມ່ນຄວາມອາດເປັນໄປໄດ້ທີ່ໃຫຍ່ຫລວງຢ່າງທຽບບໍ່ໄດ້ອີກພ້ອມ. ແຕ່ຢູ່ບ່ອນນີ້ ການປະກົດຜົນເປັນຈິງ - ຂອງຄວາມອາດເປັນໄປໄດ້ໃຫມ່ບໍ່ດຳເນີນໄປຢ່າງອັດຕະໂນມັດໄດ້ ເຊັ່ນດຽວກັນ, ຫາກຍັງຮຽກຮ້ອງໃຫ້ມີຄວາມພະຍາຍາມ ແລະ ການຕໍ່ສູ້ອີກ. ອັນ ນີ້ບໍ່ແມ່ນການຕໍ່ສູ້ລະຫວ່າງຊົນຊັ້ນ, ຫາກແມ່ນການຕໍ່ສູ້ຂອງປະຊາຊົນຕ້ານທຸກສິ່ງທີ່ຊ້ຳຊາກ ແລະ ຫລ້າຫລັງເພື່ອສິ່ງໃຫມ່. ດ້ວຍເຫດນັ້ນ ພາຍໃຕ້ສັງຄົມນິຍົມຄວາມອາດເປັນໄປໄດ້ໃຫມ່ຈຶ່ງປະກົດຜົນເປັນຈິງຢ່າງມີຜົນ ແລະ ສົມບູນກວ່າຫມູ່ຫມົດ.

24 / VII
ຫ້າມຈຳໜ່າຍ

## ພາກທີ ຫົກ

# ຄົນຮັບຮູ້ໂລກຮອບຕົວ ແນວໃດ.

### ໑. ຄວາມຮັບຮູ້ແມ່ນຫຍັງ ?

ແຕ່ດົນມາແລ້ວ ທີ່ຄົນໄດ້ຕັ້ງບັນຫາຂຶ້ນມາເຊັ່ນ ຈະສາມາດຮັບຮູ້ໂລກ ໄດ້ຫລືບໍ່, ຂະບວນວິວັດຄວາມຮັບຮູ້ດຳເນີນໄປຕາມກົດເກນໃດແດ່, ຈະພິສູດວ່າຄວາມຮັບຮູ້ ຂອງພວກເຮົາ ນັ້ນຖືກຕ້ອງຫລືບໍ່ ແລະ ຈະພິສູດຄວາມ ສາມາດຮັບຮູ້ໂລກນີ້ແນວໃດ ? ທິດສະດີກ່ຽວກັບຄວາມຮັບຮູ້ຂອງລັດທິວັດຖຸນິຍົມ-ສັດຈະວິພາກຄົ້ນຄວ້າ ແລະ ແກ້ໄຂບັນຫາດັ່ງກ່າວ.

ຄວາມຮັບຮູ້ ແມ່ນການສ່ອງແສງເຖິງຄວາມເປັນຈິງຢ່າງຕັ້ງຫນ້າແລະ ມີເປົ້າຫມາຍຢູ່ໃນຈິດສຳນຶກຂອງຄົນ. ພື້ນຖານຂອງທິດສະດີກ່ຽວກັບຄວາມຮັບຮູ້ນັ້ນແມ່ນທິດສະດີກ່ຽວກັບການສ່ອງແສງເຊິ່ງ ວ.ອີ.ເລນິນໄດ້ເສີມຂະຫຍາຍ-ຫລັກມູນພື້ນຖານຂອງມັນໃນບົດນິພົນຂອງເພິ່ນເຊັ່ນ "ລັດທິ ວັດຖຸນິຍົມແລະລັດທິບົດຮຽນຕຳຫນິວິພາກ" ແລະ "ສະຫມຸດປັດຊະຍາ". ວ.ອີ.ເລນິນ ໃຫ້ຂໍ້ສັງເກດວ່າ ຄວາມຮັບຮູ້ໂລກພາຍນອກ ແລະ ການສ່ອງແສງມັນອອກມາ ໃນມັນສະຫມອງຂອງຄົນນັ້ນ ແມ່ນພື້ນຖານຂອງທິດສະດີກ່ຽວກັບຄວາມຮັບຮູ້ ຂອງລັດທິວັດຖຸນິຍົມສັດຈະວິພາກ. ໂລກພາວະວິໄສແມ່ນຕົ້ນກຳເນີດແຫ່ງຄວາມ ຮູ້ຂອງພວກເຮົາ. ພວກຈິດຕະນິຍົມພາວະວິໄສ ແລະພວກຈິດຕະນິຍົມອັດຕະວິ-ໄສ ລ້ວນແຕ່ພະຍາຍາມຫັກລ້າງຫລັກມູນດັ່ງກ່າວ. ພວກຈິດຕະນິຍົມພາວະວິ-ໄສ (ເຊັ່ນຕົວຢ່າງ, ເຮເກນ) ຢືນຢັນວ່າ ຄົນຮັບຮູ້ຈິດສຳນຶກອັນໃດອັນຫນຶ່ງທີ່ຄົງຢູ່ນອກຕົວຄົນແລະບໍ່ຂຶ້ນກັບຄົນ ("ແນວຄິດເດັດຖານ", "ວິນຍານ ແຫ່ງໂລກ" ແລະ ອື່ນໆ). ພວກຈິດຕະນິຍົມອັດຕະວິໄສ (ເຊັ່ນຕົວຢ່າງ, ເບີກເລ) ຖືວ່າຄົນຮັບຮູ້ປະກົດການຂອງຈິດສຳນຶກຂອງຕົນເອງ ເນື່ອງຈາກວ່າໂລກແມ່ນ

ໜາກຜົນຂອງການເຄື່ອນໄຫວດ້ານຈິດໃຈຂອງຄົນ. ພວກອະວິຊາ (ເຊັ່ນຕົວຢ່າງ ກັງ, ຮູມ) ເວົ້າລວມແລ້ວ ປະຕິເສດຄວາມສາມາດຮັບຮູ້ໂລກ, ພວກເຂົາເຈົ້າຖືວ່າ ໃນດ້ານຫລັກການແລ້ວ ບໍ່ສາມາດຈະຮັບຮູ້ຄວາມເປັນຈິງແບບພາວະວິໄສ.

ແຕ່ສະໄໝກ່ອນປັດຊະຍາລັດທິມາກ ນັ້ນ ບັນດານັກປັດຊະຍາວັດຖຸນິຍົມມີທັດສະນະຖືກຕ້ອງວ່າ ໂລກຄົງຢູ່ຢ່າງພາວະວິ ໄສ, ວ່າມີຄວາມສາມາດ ຈະຮັບຮູ້ໂລກໄດ້. ແຕ່ທິດສະດີກ່ຽວກັບຄວາມຮັບຮູ້ຂອງພວກເຂົາເຈົ້າມີຂໍ້ບົກພ່ອງຫລາຍຂໍ. ກ່ອນອື່ນໝົດ ພວກເຂົາເຈົ້າຖືວ່າ ຂະບວນວິວັດຄວາມຮັບຮູ້ ນັ້ນເປັນຂະບວນວິວັດສ່ອງແສງໂລກແບບບໍ່ຫາວ ຫັນໃນຈິດສຳນຶກຂອງຄົນ. ພວກເຂົາເຈົ້າບໍ່ເຫັນບົດບາດຂອງພາກປະຕິບັດຕົວຈິງໃນຂະບວນວິວັດຄວາມ ຮັບຮູ້ ແລະ ບໍ່ສາມາດຈະເຂົ້າໃຈໄດ້ວ່າ ຄົນສາມາດຮັບຮູ້ໂລກພາຍນອກນັ້ນພຽງແຕ່ຜ່ານການການດັດສ້າງໂລກໃນຕົວຈິງ ໂດຍດັດປ່ຽນມັນເທົ່ານັ້ນ. ກ.ມາກໄດ້ຮຽກຂໍ້ບົກພ່ອງຂອງລັດທິວັດຖຸນິຍົມທັງໝົດກ່ອນນີ້ ເປັນການສັງເກດຕິກຕອງ-ແບບບໍ່ຫາວຫັນ. ນັກວັດຖຸນິຍົມກ່ອນສະໄໝ ມາກ ນັ້ນຍັງບໍ່ທັນເຫັນລັກສະນະສັງຄົມຂອງຄວາມຮັບຮູ້. ພວກເຂົາເຈົ້າຖືວ່າ ແຕ່ລະຄົນຮັບຮູ້ໂດຍຂຶ້ນກັບ ລະດັບຂະຫຍາຍຕົວຂອງອະໄວຍະວະຄວາມຮູ້ສຶກ, ຈິນຕະນາການ, ຄວາມ ສາມາດ ແລະ ລະດັບການສຶກສາ. ພວກເຂົາເຈົ້າຍັງບໍ່ສາມາດໄຈ້ແຍກລັກສະ-ນະທີ່ສັບສົນ, ຂັດແຍ່ງກັນ ແລະ ສັດຈະວິພາກຂອງການຮັບຮູ້, ບັນດານັກປັດຊະຍາ ຖືສຳຄັນບົດບາດຂອງສະຕິປັນຍາຫລືຄວາມຮູ້ສຶກໃນຄວາມຮັບຮູ້ ແບບພວກອະພິທຳ.

ທິດສະດີ ມາກ-ເລນິນ ກ່ຽວກັບຄວາມຮັບຮູ້ ໄດ້ແກ້ໄຂຂໍ້ບົກພ່ອງດັ່ງກ່າວ ທິດສະດີນີ້ໄດ້ພິສູດວ່າ ຄວາມຮັບຮູ້ສາມາດຈະເປັນໄປໄດ້ກໍພຽງແຕ່ບົນພື້ນຖານການດັດສ້າງໂລກ ໃນຕົວຈິງ ໂດຍຜ່ານການກະທົບຢ່າງຫ້າວຫັນຂອງຄົນ ຕໍ່ທຳມະຊາດ ແລະ ສັງຄົມ. ທິດສະດີມາກ-ເລນິນ ກ່ຽວກັບຄວາມຮັບຮູ້ຍັງໄດ້ຊີ້ແຈງໃຫ້ເຫັນວ່າ ບໍ່ແມ່ນຄົນຜູ້ໃດຜູ້ໜຶ່ງເປັນຜູ້ຮັບຮູ້ ແຕ່ແມ່ນສັງຄົມເວົ້າລວມ ໂດຍສອດຄ່ອງກັບຄວາມອາດເປັນໄປໄດ້ ແລະ ພາຫະນະຄວາມຮັບຮູ້ທີ່ມີຢູ່ . ທິດສະດີມາກ-ເລນິນ ຍັງໄດ້ໄຈ້ແຍກລັກສະນະສັດຈະວິພາກຂອງຄວາມຮັບຮູ້.

ຄວາມຮັບຮູ້ແມ່ນຂະບວນການວິວັດອັນບໍ່ມີຂອບເຂດຂອງການເຄື່ອນເໜັງ

ຂອງແນວຄິດຂອງພວກເຮົາ ຈາກຄວາມບໍ່ຮູ້ໄປເຖິງຄວາມຮູ້, ຈາກຄວາມຮູ້ທີ່ບໍ່ສົມບູນ, ບໍ່ເລິກເຊິ່ງ ໄປເຖິງຄວາມຮູ້ທີ່ສົມບູນ ແລະ ຮອບດ້ານກວ່າ.ດ້ວຍເຫດນັ້ນ ຜູ້ສ້າງຕັ້ງລັດທິມາກ-ເລນິນ ຈຶ່ງໄດ້ເນັ້ນໜັກຄວາມຈຳເປັນຕ້ອງ - ໝູນໃຊ້ວິທີສັດຈະວິພາກແບບມີສະຕິໃນການຄົ້ນຄວ້າບັນຫາຄວາມຮັບຮູ້.

ພວກລັດທິແກ້ສະໄໝໃໝ່ ຕຳໜິທິດສະດີເລນິນ ກ່ຽວກັບການສ່ອງແສງ. ພວກເຂົາເຈົ້າກ່າວຫາວ່າທິດສະດີ ເລນິນ ຖືເບົາຄວາມຫ້າວຫັນຂອງຄົນແລະຄວາມຫ້າວຫັນແບບປະດິດສ້າງຂອງຈິດສຳນຶກ ແລະ ຄວາມຮັບຮູ້ ແລະ ດ້ວຍເຫດນີ້ ພວກເຂົາເຈົ້າຈຶ່ງສະເໜີໃຫ້ປ່ຽນມາດຕະເກນສ່ອງແສງດ້ວຍມາດຕະເກນພາກປະຕິບັດຕົວຈິງ ແລະ ພວກເຂົາເຈົ້າອະທິບາຍກະໂຕພາກປະຕິບັດ-ຕົວຈິງນັ້ນຢ່າງກວ້າງຂວາງກວ່າຄື ເປັນການລວບລວມ ທຸກໆຮູບແບບການ-ເຄື່ອນໄຫວຂອງຄົນ ລວມເອົາທັງການເຄື່ອນໄຫວດ້ານວັດຖຸ ແລະຈິດໃຈເຂົ້າໃນພາກປະຕິບັດຕົວຈິງ.

ທິດສະດີ ມາກ-ເລນິນ ກ່ຽວກັບຄວາມຮັບຮູ້ຖືວ່າ ຈະຕີລວາດກວາດພຽງພຶດຕິກຳຕົວຈິງກັບຄວາມຮັບຮູ້, ກັບການສ່ອງແສງ ຄວາມເປັນຈິງແບບພາວະວິໄສໃນຈິດສຳນຶກຂອງຄົນນັ້ນ ແມ່ນບໍ່ໄດ້ ແລະ ຖືວ່າພຶດຕິກຳຕົວຈິງແລະການສ່ອງແສງເປັນຄືມາດຕະເກນທີ່ເອກະລາດ ຈຶ່ງມີການກະທົບຊຶ່ງກັນ ແລະ ກັນທີ່ສັບສົນ. ທິດສະດີມາກ-ເລນິນ ຍັງຕ້ານຄວາມເຂົ້າໃຈຂອງພວກລັດທິແກ້ - ກ່ຽວກັບພຶດຕິກຳຕົວຈິງ, ກຳນົດທັດສະນະຂອງລັດທິມາກ ກ່ຽວກັບບົດບາດ - ຂອງພຶດຕິກຳຕົວຈິງ ໃນຂະບວນວິວັດຄວາມຮັບຮູ້.

## ໔. ບົດບາດຂອງພຶດຕິກຳຕົວຈິງ ໃນຂະບວນວິວັດ ຄວາມຮັບຮູ້

ທິດສະດີມາກ-ເລນິນ ກ່ຽວກັບຄວາມຮັບຮູ້ບໍ່ພຽງແຕ່ໄດ້ແຜ່ຂະຫຍາຍ ສັດຈະວິພາກວັດຖຸນິຍົມອອກສູ່ຂົງເຂດການຮັບຮູ້ເທົ່ານັ້ນ ແຕ່ຍັງໄດ້ໄຈ້ແຍກ ບົດບາດຕັດສິນຊີ້ຂາດຂອງພຶດຕິກຳຕົວຈິງໃນຂະບວນວິວັດຄວາມຮັບຮູ້. ພຶດຕິກຳ-ຕົວຈິງແມ່ນຫຍັງແທ້ ?

ພຶດຕິກຳຕົວຈິງ ແມ່ນການເຄື່ອນໄຫວດ້ານປະຫວັດສາດ-ສັງຄົມ ແລະວັດຖຸຂອງຄົນ ທີ່ແນໃສ່ເພື່ອ ດັດສ້າງທຳມະຊາດ ແລະ ສັງຄົມ, ດັດສ້າງ ໂລກຮອບຕົວ. ພື້ນຖານ ແລະ ສ່ວນປະກອບທີ່ສຳຄັນຂອງພຶດຕິກຳຕົວຈິງ ປະກອບເປັນການຜະລິດວັດຖຸ ເຊິ່ງກ່ອນອື່ນຫມົດການຜະລິດວັດຖຸອຳນວຍໃຫ້ແກ່ ການດັດສ້າງທຳມະຊາດ. ໃນຈຳນວນພຶດຕິກຳຕົວຈິງ ລວມມີທັງການເຄື່ອນ ໄຫວດ້ານການເມືອງ-ສັງຄົມຂອງຄົນເຊັ່ນ: ການຕໍ່ສູ້ຊົນຊັ້ນ, ການປະຕິວັດ ທາງສັງຄົມ, ຂະບວນການປົດປ່ອຍຊາດ ແລະ ອື່ນໆ, ຫມາຍຄວາມວ່າ ການເຄື່ອນໄຫວທີ່ແນໃສ່ເພື່ອດັດສ້າງສັງຄົມ. ການທົດລອງວິທະຍາສາດກໍ່ ແມ່ນການປະຕິບັດຕົວຈິງເຊັ່ນດຽວກັນ.

ການ ດັດສ້າງໂລກຮອບຕົວສາມາດຈະເປັນໄປໄດ້ພຽງແຕ່ບົນພື້ນຖານ - ຄວາມຮູ້ກ່ຽວກັບກົດເກນຂອງມັນ ແລະ ໂດຍສອດຄ່ອງກັບຈຸດປະສົງເຊິ່ງ ຄົນໄດ້ຕັ້ງໄວ້.

ພຶດຕິກຳຕົວຈິງມີບົດບາດຫຍັງແດ່ ໃນຂະບວນວິວັດຄວາມຮັບຮູ້ ? ກ່ອນອື່ນຫມົດ ພຶດຕິກຳຕົວຈິງແມ່ນພື້ນຖານຂອງຄວາມຮັບຮູ້. ເລື່ອງນີ້ສະແດງອອກຢູ່ບ່ອນວ່າ ແຕ່ລະທິດສະດີກຳເນີດຂຶ້ນມາບົນພື້ນຖານພຶດຕິກຳຕົວຈິງ, ແມ່ນການສັງລວມຂອງມັນ. ເຊັ່ນຕົວຢ່າງ ລັດທິມາກໄດ້ກຳເນີດຂຶ້ນມາໃນຖານະເປັນ-ການສັງລວມພຶດຕິກຳຕົວຈິງຂອງການຕໍ່ສູ້ປະຕິວັດຂອງຊົນຊັ້ນກຳມາຊີບ. ບໍ່ວ່າເວລາໃດທິດສະດີກໍ່ສັງລວມພຶດຕິກຳຕົວຈິງ ໂດຍກົງ (ຕົວຢ່າງຄືທິດສະດີ ຄະນິດສາດສະໄຫມໃຫມ່ ),ແຕ່ໃນທີ່ສຸດ ການເຄື່ອນໄຫວຕົວ ຈິງຂອງຄົນ ແມ່ນພື້ນຖານຂອງທຸກໆທິດສະດີ.

ຄວາມຮັບຮູ້ຂອງຄົນໄດ້ຮັບການເສີມຂະ ຫຍາຍຂຶ້ນມາກໍ່ຍ້ອນຄວາມ ຕ້ອງການຂອງພຶດຕິກຳຕົວຈິງ. ຄວາມຮູ້ດ້ານຄະນິດສາດທຳອິດໄດ້ເກີດຂຶ້ນມາຈາກຄວາມຕ້ອງການຕົວຈິງໃນການວັດແທກເນື້ອທີ່,ຄິດໄລ່ບໍລິມາດຂອງພາຊະນະ, ຍ້ອນຄວາມຕ້ອງການນັບຈຳນວນຂອງເຄື່ອງມື ແລະ ຜະລິດຕະພັນແລະອື່ນໆ. ພຶດຕິກຳຕົວຈິງມີບົດບາດເປັນກຳລັງຊຸກດັນໃຫ້ແກ່ຄວາມຮັບຮູ້. ເຊັ່ນ ຄວາມຕ້ອງການຕົວຈິງຂອງການຜະລິດແບບທັນສະໄຫມໃນດ້ານການທັນເປັນອັດຕະ-ໂນມັດນັ້ນ ໄດ້ນຳໄປເຖິງການ ກຳເນີດເກີດມີຂະແຫນງວິທະຍາສາດ ທີ່ຂະຫຍາຍຕົວຢ່າງວ່ອງໄວຄືວິຊາ ຊິແບັກເນຕິກ. ນອກຈາກນັ້ນ ພຶດຕິກຳ ຕົວຈິງ

ໄດ້ວາງໜ້າທີ່ອັນແນ່ນອນຕໍ່ໜ້າທິດສະດີ, ວິທະຍາສາດ ແລະ ດ້ວຍເຫດ ນີ້ເອງ ຈຶ່ງຊຸກຍູ້ ການຂະຫຍາຍຕົວຂອງທິດສະດີ. ຕົວຢ່າງກໍ່ຄືຄວາມຈຳເປັນໃນການພິຊິດອະວະກາດນັ້ນໄດ້ອຳນວຍໃຫ້ແກ່ການຂະຫຍາຍຕົວຂອງວິທະຍາ-ສາດຢ່າງຄົບຊຸດ.

ພຶດຕິກຳ ຕົວຈິງປະກອບພາຫະນະຄົ້ນຄວ້າເຕັກນິກໃຫ້ແກ່ການຮັບຮູ້ ວິທະຍາສາດໝາຍຄວາມວ່າປະກອບເຄື່ອງຈັກ, ເຄື່ອງມື, ອຸປະກອນ ເຊິ່ງ ຖ້າຫາກຂາດສິ່ງດັ່ງກ່າວແລ້ວ ການຂະຫຍາຍຕົວຂອງວິທະຍາສາດສະໄໝໃໝ່ກໍ່ບໍ່ອາດຈະເປັນໄປໄດ້. ຕົວຢ່າງຄືວັດຖຸວິທະຍາສະໄໝໃໝ່ທີ່ໄດ້ເຂົ້າເຖິງ - ຄວາມລີ້ລັບຂອງອະນຸໂລກ ແລະ ຄົ້ນຄວ້າໂຄງຮ່າງຂອງປະລະມານູ, ຈາວຂອງປະລະມານູ ແລະ ຂອງເມັດພື້ນຖານນັ້ນ ໄດ້ໝູນໃຊ້ເຄື່ອງເພີ່ມຄວາມ-ໄວທີ່ມີກຳລັງມະຫາສານ (ຊິນໂຄຼນຟາໂຊຕົງ). ສຳລັບການຄົ້ນຄວ້າອະວະ-ກາດຕ້ອງການຈະຫລວດອະວະກາດ ແລະ ອື່ນໆ. ທຸກຢ່າງເຫລົ່ານີ້ລ້ວນແຕ່ແມ່ນຜະລິດຕະພັນຂອງອຸດສາຫະກຳທັນສະໄໝ.

ພຶດຕິກຳຕົວຈິງຍັງແມ່ນຈຸດປະສົງຂອງຄວາມຮັບຮູ້ອີກ ພ້ອມ ເນື່ອງຈາກ-ວ່າ ໜ້າທີ່ຂອງຄວາມຮັບຮູ້ແມ່ນຕ້ອງກຳໄດ້ກຳລັງແຮງຂອງທຳມະຊາດ ເພື່ອໝູນໃຊ້ມັນມາຮັບໃຊ້ມວນມະນຸດ, ຮັບຮູ້ບັນດາກົດເກນສັງຄົມ ເພື່ອກະທົບໃສ່ບາດກ້າວຂອງເຫດການປະຫວັດສາດຕ່າງໆ. ກະໂຕການໝູນໃຊ້ຄວາມຮູ້ ທີ່ໄດ້ຮັບຈາກພຶດຕິກຳຕົວຈິງນັ້ນ ມີຄວາມສັບສົນ ແລະ ມີຄວາມຂັດແຍ່ງໃນຕົວ. ບາງຄັ້ງບາງຄາວ ການຄົ້ນພົບດ້ານວິທະຍາສາດຖືກແຍກອອກຈາກການ ໝູນໃຊ້ຕົວຈິງເປັນ ໄລຍະຫລາຍປີ ແລະຫລາຍສິບປີ. ແຕ່ການແຍກດັ່ງນີ້ນັບມື້ສັ້ນເຂົ້າ, ວິທະຍາສາດໄດ້ກາຍເປັນກຳລັງແຫ່ງການຜະລິດໂດຍກົງ.

ດ້ວຍເຫດນີ້ ຈຶ່ງມີການຕັ້ງບັນຫາກ່ຽວກັບຄວາມເປັນເອກະພາບລະຫວ່າງທິດສະດີ ແລະ ພຶດຕິກຳຕົວຈິງ. "ທິດສະດີ" ແລະ"ພຶດຕິກຳຕົວຈິງ" ແມ່ນມາດຕະເກນປັດຊະຍາທີ່ໝາຍເຖິງສອງດ້ານ (ຈິດໃຈແລະວັດຖຸ) ຂອງ ຂະບວນວິວັດທີ່ເປັນເອກະພາບດ້ານປະຫວັດສາດ-ສັງຄົມ. ມາດຕະເກນດັ່ງກ່າວນີ້ໄດ້ຮັບການໝູນໃຊ້ເຂົ້າໃຈການວິໄຈ ການເຄື່ອນໄຫວຂອງຄົນ ເຊິ່ງ ກ່ອນອື່ນໝົດໄດ້ແຍກອອກເປັນການເຄື່ອນໄຫວດ້ານພຶດຕິກຳຕົວຈິງ ແລະດ້ານ ທິດສະດີ. ກ່ຽວກັບພຶດຕິກຳຕົວຈິງນັ້ນໄດ້ກ່າວມາຂ້າງເທິງນີ້ແລ້ວ".

ຄຳສັບ "ທິດສະດີ" ໄດ້ຮັບການຫມູນໃຊ້ໃນສອງຄວາມຫມາຍ: ໑) ໃນຄວາມຫມາຍກ້ວາງ ຫມາຍຄວາມວ່າ ຄວາມຮູ້ເວົ້າລວມ ໂດຍແຕກຕ່າງ ກັນກັບການເຄື່ອນໄຫວຕົວຈິງຂອງສັງຄົມ; ໒) ໃນຄວາມຫມາຍແຄບ ຫມາຍເຖິງສ່ວນປະກອບຂອງຄວາມຮູ້ດ້ານວິທະຍາສາດ ທີ່ມີຮູບແບບທິດສະດີ ແລະ ໄດ້ຈັດເຂົ້າເປັນລະບົບ.

ໃນການພິຈາລະນາບັນຫາກ່ຽວກັບຄວາມເປັນເອກະພາບລະຫວ່າງທິດສະດີ ແລະ ພຶດຕິກຳຕົວຈິງນັ້ນ ຄຳສັບ "ທິດສະດີ" ໄດ້ຮັບການຫມູນໃຊ້ ໃນຄວາມຫມາຍທີຫນຶ່ງ. ແຕ່ໃນນັ້ນຕ້ອງຄຳນຶງເຖິງລະບົບວິທະຍາສາດປະກອບ-ເປັນພື້ນຖານ, ເປັນແກ່ນສານຂອງຄວາມຮູ້ເວົ້າທົ່ວໄປ. ການແກ້ໄຂບັນ ຫາວ່າດ້ວຍຄວາມເປັນເອກະພາບລະຫວ່າງທິດສະດີ ແລະ ພຶດຕິກຳຕົວຈິງກຳນົດການຕັ້ງ ແລະ ແກ້ໄຂຫລາຍບັນຫາຂອງປັດຊະຍາມາກ-ເລນິນ. ວ.ອີ. ເລນິນ ໄດ້ຮຽກຫລັກການແຫ່ງຄວາມເປັນເອກະພາບ ລະຫວ່າງທິດສະດີແລະພຶດຕິກຳຕົວຈິງນັ້ນເປັນຫີນສີລາຂອງລັດທິມາກ. ທ່ານ ໄດ້ຂຽນວ່າ: "ທັດສະນະ-ກ່ຽວກັບຊີວິດ, ກ່ຽວກັບພຶດຕິກຳຕົວຈິງຕ້ອງແມ່ນທັດສະນະທຳອິດ ແລະ ພື້ນຖານຂອງທິດສະດີກ່ຽວກັບຄວາມຮັບຮູ້ " ໑) .

ການພົວພັນເຊິ່ງກັນ ແລະ ກັນລະຫວ່າງທິດສະດີ ແລະ ພຶດຕິກຳ ຕົວຈິງນັ້ນ ໄດ້ຮັບການນິຍາມດັ່ງນີ້: ທິດສະດີສ່ອງແສງເຖິງ ກົດເກນຂະຫຍາຍ ຕົວຂອງໂລກຮອບຕົວ ແຕ່ຫາກບໍ່ສາມາດປ່ຽນແປງໂລກຮອບຕົວນັ້ນໄດ້.ການປ່ຽນແປງ,ການດັດສ້າງໂລກນັ້ນແມ່ນຫນ້າທີ່ຂອງພຶດຕິກຳຕົວຈິງ. ແຕ່ທິດສະດີເປັນສິ່ງຊີ້ ທາງໃຫ້ແກ່ການດັດສ້າງດັ່ງກ່າວ. ນອກຈາກນັ້ນ ມັນສົ່ງຜົນສະທ້ອນໃສ່ພຶດຕິກຳຕົວຈິງ ຊຸກຍູ້ພຶດຕິກຳຕົວຈິງຂະຫຍາຍຕົວ. ດ້ວຍເຫດນັ້ນພຶດຕິກຳ ຕົວຈິງທີ່ປາສະຈາກທິດສະດີນັ້ນ ແມ່ນມືດມົນ, ແລະ ທິດສະດີໂດຍປາສະຈາກພຶດຕິກຳຕົວຈິງ ແມ່ນແບບບໍ່ມີເປົ້າຫມາຍ. ກະໂຕທິດສະດີ ມາກ-ເລນິນ ໄດ້ຂະຫຍາຍຕົວບົນພື້ນຖານການສັງລວມ ພຶດຕິກຳຕົວຈິງຂອງການກໍ່ສ້າງສັງຄົມນິຍົມ ແລະ ຂອງຂະບວນການກອມມູນິດນິຍົມ ແຕ່ໃນຂະນະດຽວກັນນັ້ນມັນຊີ້ທາງໃຫ້ແກ່ການດັດສ້າງໂລກແບບປະຕິວັດ, ໃຫ້ຄຳແນະນຳໃນດ້ານຕົວຈິງ.

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ. ເຫລັ້ມ ໑໘, ຫນ້າ ໑໔໕.

## ຍ. ທິດສະດີ ວ່າດ້ວຍສັດຈະທຳ

ຄວາມເຂົ້າໃຈກ່ຽວກັບສັດຈະທຳນັ້ນ ພົວພັນເຖິງ ຄວາມຮູ້ຂອງພວກເຮົາ ຄວາມຮູ້ອາດຈະເປັນແບບສັດຈະທຳ ຫລືແບບຈອມປອມ. ຄວາມຮູ້ແບບສັດຈະທຳສ່ອງແສງໂລກ ແລະ ກົດເກນຂອງໂລກນັ້ນຢ່າງຖືກຕ້ອງ, ສອດຄ່ອງ ກັບໂລກ. ສ່ວນແບບຈອມປອມ ບໍ່ສອດຄ່ອງ. ດ້ວຍເຫດນັ້ນ ສັດຈະທຳໃນປັດຊະຍາມາກ-ເລນິນ ແມ່ນຄວາມຮູ້ອັນຖືກຕ້ອງກ່ຽວກັບໂລກ ທີ່ໄດ້ຮັບການທົດສອບ ແລະ ຢັ້ງຢືນໃນພຶດຕິກຳຕົວຈິງ. ຕາມຮູບແບບຂອງມັນແລ້ວ ສັດຈະທຳມີ ລັກສະນະອັດຕະວິໄສ, ເພາະວ່າ ຄວາມຮູ້ມັນນອນຢູ່ໃນມັນສະຫມອງຂອງແຕ່ລະບຸກຄົນ. ໃນດ້ານເນື້ອໃນແລ້ວ ສັດຈະທຳມີລັກສະນະພາວະວິໄສ ເນື່ອງຈາກວ່າມັນແມ່ນການສ່ອງແສງໂລກພາວະວິໄສຢ່າງຖືກ ຕ້ອງ.

ວ.ອິ.ເລນິນ ໄດ້ຮຽກເນື້ອໃນແບບພາວະວິໄສຂອງຄວາມຮູ້ ຂອງພວກເຮົານັ້ນເປັນສັດຈະທຳແບບພາວະວິໄສ ແລະ ທ່ານໄດ້ເນັ້ນຫນັກວ່າ ມັນທັງບໍ່ຂຶ້ນກັບຄົນ, ທັງບໍ່ຂຶ້ນກັບ ມວນມະນຸດ, ແຕ່ຫາກລ້ວນແຕ່ກຳນົດດ້ວຍຂະບວນວິວັດພາວະວິໄສ ທີ່ເກີດຂຶ້ນໃນໂລກ. ເຊັ່ນຕົວຢ່າງ ການຢັ້ງຢືນວ່າ: " ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຕັ້ງຢູ່ໃຈກາງຂອງແຫລມອິນດູຈີນ" ນັ້ນແມ່ນສັດຈະທຳພາວະວິໄສ ເພາະວ່າມັນສ່ອງແສງເຖິງທີ່ຕັ້ງຕົວຈິງ ຂອງລາວ ໃນແຜນທີ່ໂລກ ແລະ ທີ່ຕັ້ງນີ້ບໍ່ຂຶ້ນກັບຈິດສຳນຶກຂອງຄົນ.

ການຮັບຮູ້ສັດຈະທຳ ພາວະວິໄສນັ້ນ ແມ່ນພື້ນຖານຂອງທຸກໆການ ເຄື່ອນໄຫວ ວິທະຍາສາດ ແລະ ພຶດຕິກຳຕົວຈິງຂອງຄົນ. ວິທະຍາສາດອາດ ສາມາດຈະຂະຫຍາຍຕົວ ແລະ ໄດ້ຮັບການຫມູນໃຊ້ເຂົ້າໃນພຶດຕິກຳຕົວຈິງ ຖ້າຫາກ ມັນສ່ອງແສງໂລກພາວະວິໄສຢ່າງຖືກຕ້ອງ ຫມາຍຄວາມວ່າ ຂໍ້ວິນິດໄສ ແລະ ຂໍ້ສະຫລຸບຂອງມັນມີລັກສະນະສັດຈະທຳພາວະວິໄສ. ການເຄື່ອນ ໄຫວຕົວຈິງຍັງອາດສາມາດຈະເປັນໄປໄດ້ພຽງແຕ່ພາຍໃຕ້ເງື່ອນໄຂທີ່ວ່າ ຖ້າມັນອີງໃສ່ຄວາມຮູ້ກ່ຽວກັບໂລກທີ່ຖືກຕ້ອງ ແລະ ສັດຈະທຳພາວະວິໄສ.

ໄດ້ເກີດມີຄຳຖາມວ່າ ຄົນຮັບຮູ້ສັດຈະທຳພາວະວິໄສນັ້ນແນວໃດ=ຮັບ ຮູ້ບາດດຽວ, ທັງຫມົດ, ຢ່າງສົມບູນ ຫລືຮັບຮູ້ ໄປເທື່ອລະກາວ, ເປັນແຕ່ລະ

ພາກສ່ວນ. ສາມາດຕອບຄຳຖາມນີ້ໄດ້ພຽງແຕ່ພາຍຫລັງທີ່ໄດ້ເຂົ້າໃຈການພົວພັນກັນລະຫວ່າງສັດຈະທຳເດັດຖານ ແລະ ທຽບຖານ. ຄວາມເຂົ້າໃຈ ກ່ຽວກັບສັດຈະທຳເດັດຖານ ແລະ ທຽບຖານນັ້ນ ສ່ອງແສງເຖິງລະດັບຄວາມເລິກເຊິ່ງທີ່ແຕກຕ່າງກັນຂອງຄວາມຮູ້ຂອງພວກເຮົາ, ເຖິງການເຊື່ອມຊຶມ ຂອງຄວາມຮູ້ດັ່ງກ່າວເຂົ້າໃນຄວາມເລິກລັບຂອງໂລກ.

ໂລກ ທີ່ເປັນບ່ອນດຳເນີນຊີວິດ ແລະ ເຄື່ອນໄຫວຂອງຄົນ, ທີ່ຄົນຮັບ ຮູ້ ແລະ ດັດສ້າງນັ້ນ ບໍ່ສິ້ນສຸດ ແລະ ບໍ່ຫມົດເປັນ. ໂລກບໍ່ສິ້ນສຸດໃນກາງ ຫາວ ແລະ ກາລະເວລາ, ໂລກເຄື່ອນເຫນັງ ແລະ ຂະຫຍາຍຕົວຢູ່ເປັນປະຈຳ . ຄວາມຮັບຮູ້ຂອງຄົນບໍ່ສາມາດຈະກວມເອົາຄວາມຮູ້ກ່ຽວກັບໂລກຢ່າງຄົບ ຖ້ວນ ແລະ ຫມົດສິ້ນໄດ້. ໃນແຕ່ລະໄລຍະປະຫວັດສາດ ຄວາມຮັບຮູ້ຖືກຈຳກັດດ້ວຍລະດັບການຂະຫຍາຍຕົວດ້ານການຜະລິດ, ວິທະຍາສາດ, ເຕັກນິກທີ່ບັນລຸໄດ້ໃນໄລຍະນັ້ນ. ແຕ່ທຸກໆສິ່ງວັດຖຸ ແລະ ປະກົດການໃນໂລກ ເຖິງຈະເປັນ - ແບບສັບສົນເທົ່າໃດກໍ່ຕາມ ລ້ວນແຕ່ສາມາດຮັບຮູ້ໄດ້ທັງນັ້ນ. ລັກສະນະຄວາມຮັບຮູ້ຂອງຄົນທີ່ສັບສົນນີ້ ໄດ້ຮັບການໄຈ້ແຍກໃນສັດຈະວິພາກ ສັດຈະທຳ ເດັດຖານ ແລະ ທຽບຖານ. ສັດຈະທຳເດັດຖານແມ່ນຄວາມຮູ້ກ່ຽວກັບໂລກ ທີ່ສົມບູນ ແລະ ເຖິງຖອງ, ເຊິ່ງສະແດງຕົວອອກເປັນຈຸດຫມາຍຂອງການຮັບຮູ້ ວິທະຍາສາດ, ແຕ່ໃນຕົວຈິງແລ້ວ ບໍ່ອາດຈະບັນລຸໄດ້. ດ້ວຍເຫດນັ້ນ ສັດຈະທຳເດັດຖານ ຈຶ່ງໄດ້ຮັບການນິຍາມວ່າ ເປັນຄວາມຮູ້ກ່ຽວກັບໂລກທີ່ຖືກ ຕ້ອງເຊິ່ງການຂະຫຍາຍຕົວຂອງວິທະຍາສາດ ແລະ ພຶດຕິກຳຕົວຈິງໃນອົນຕໍ່ໄປ ບໍ່ອາດຈະຫັກລ້າງມັນໄດ້. ສັດຈະທຳທຽບຖານ ແມ່ນຄວາມຮູ້ກ່ຽວກັບໂລກທີ່ ບໍ່ສົມບູນ, ບໍ່ສຳເລັດຮູບ ແຕ່ຖືກຕ້ອງ, ເຊິ່ງຈະໄດ້ຮັບການປັບປຸງໃຫ້ຊັດເຈນ, ລຶງເລິກ ແລະ ຂະຫຍາຍຕົວທ່າມກາງຂະບວນວິວັດການຮັບຮູ້. ແຕ່ໃນຄວາມຮູ້ທຽບຖານດັ່ງກ່າວມີບາງຕອນ, ບາງສ່ວນປະກອບຂອງຄວາມຮູ້ເດັດຖານ . ດ້ວຍເຫດນີ້ ວ.ອີ.ເລນິນໄດ້ຂຽນວ່າ ໃນສັດຈະທຳທຽບຖານແຕ່ລະຂໍ້ ລ້ວນແຕ່ມີພາກສ່ວນນ້ອຍ, ເມັດນ້ອຍ, ຫນໍ່ແຫນງຂອງສັດຈະທຳເດັດຖານ. ອີກດ້ານຫນຶ່ງ ກະໂຕສັດຈະທຳເດັດຖານເອງ ກໍ່ປະກອບຂຶ້ນດ້ວຍຜົນລວມຂອງສັດຈະທຳທຽບຖານ.

ໃນປັດຈຸະຍາ ມີທັງຄວາມເຂົ້າໃຈແບບອະພິທຳກ່ຽວກັບການພົວພັນກັນລະ

ຫວ່າງສັດຈະທຳເດັດຖານ ແລະ ທຽບຖານ ເຊິ່ງໄດ້ສະແດງອອກໃນລັດທິຄຳພີຕາຍຕົວ ແລະ ລັດທິທຽບຖານ. ລັດທິຄຳພີຕາຍຕົວຮັບຮູ້ແຕ່ສັດຈະທຳທີເດັດຖານ, ຖາວອນ ແລະ ບໍ່ມີການປ່ຽນແປງ ແລະ ປະຕິເສດທຸກໆສັດຈະ ທຳທຽບຖານ ອັນນຳໄປເຖິງການບໍ່ເອົາຫົວຊາ ປະກົດການໃໝ່, ທ່າອຽງໃໝ່ໃນການຂະຫຍາຍຕົວທາງສັງຄົມ, ບໍ່ເອົາຫົວຊາ ສະຖານະການທີ່ປ່ຽນ ແປງໃໝ່ ແລະ ອື່ນໆ. ກົງກັນຂ້າມ, ລັດທິທຽບຖານຖືສຳຄັນລັກສະນະທຽບຖານຂອງຄວາມຮູ້ຂອງພວກເຮົາ ແລະ ປະຕິເສດສັດຈະທຳເດັດຖານ. ລັດທິທຽບຖານ ແມ່ນພື້ນຖານທາງທິດສະດີຂອງລັດທິແກ້ອຽງຂວາ ທີ່ອາໄສການ ປ່ຽນແປງຄວາມເປັນຈິງດ້ານສັງຄົມ ແລະ ລັກສະນະທຽບຖານຂອງຄວາມຮູ້ ຂອງພວກເຮົາ ກ່ຽວກັບຄວາມເປັນຈິງນັ້ນ ເປັນຂໍ້ອ້າງອີງເພື່ອດັດແກ້ຫລັກການພື້ນຖານຂອງລັດທິມາກ-ເລນິນ.

ໜຶ່ງໃນຈຳນວນລັກສະນະພິເສດຂອງສັດຈະທຳນັ້ນ ແມ່ນລັກສະນະຮູບປະທຳຂອງມັນ. ໃນປັດຊະຍາມາກ-ເລນິນ ມີຂໍ້ວິນິດໄສຄື ບໍ່ມີສັດຈະທຳແບບ - ນາມມະທຳ,ສັດຈະທຳ ເວລາໃດກໍ່ເປັນຮູບປະທຳ. ອັນນີ້ໝາຍຄວາມວ່າແຕ່ລະຂໍ້ວິນິດໄສທາງທິດສະດີລ້ວນແຕ່ແມ່ນສັດຈະທຳພຽງແຕ່ໃນເງື່ອນໄຂມີທີ່ຕັ້ງ- ແລະ ກາລະເວລາທີ່ແນ່ນອນ. ທຸກຄົນຮູ້ແລ້ວວ່າ ນ້ຳ ຈະຟົດເມື່ອມີອຸນຫະພູມ ໑໐໐ ອົງສາ. ກົດເກນນີ້ແມ່ນສັດຈະທຳຫລືບໍ່ ? ຈະຕອບບັນຫານີ້ຢ່າງ ນາມມະທຳແມ່ນບໍ່ໄດ້. ໃນສະພາບຄວາມກົດດັນຂອງບັນຍາກາດທຳມະດານັ້ນ ນ້ຳຟົດເມື່ອມີອຸນຫະພູມ ໑໐໐ ອົງສາແຊນຊິອຸສ. ແຕ່ຢູ່ເທິງພູທີ່ສູງເຖິງ ໔-ພັນແມັດເໜືອລະດັບນ້ຳທະເລນັ້ນ ນ້ຳຈະຟົດເມື່ອມີອຸນຫະພູມ ໘໐ ອົງສາ ແຊນຊິອຸສ, ແລະ ຖ້າຢູ່ສູງກວ່ານັ້ນ ນ້ຳຈະ ຟົດ ເມື່ອມີອຸນຫະພູມ ໗໐ ອົງສາ . ອັນນີ້ໝາຍຄວາມວ່າ ສັດຈະທຳເວລາໃດກໍ່ຕ້ອງສອດຄ່ອງກັບຂົງເຂດອັນ ແນ່ນອນຂອງຄວາມເປັນຈິງ. ແຕ່ກະໂຕຄວາມເປັນຈິງມີການຂະຫຍາຍຕົວ.ໂດຍສະເພາະອັນນີ້ມັນພົວພັນເຖິງສັງຄົມ. ດ້ວຍເຫດນັ້ນ ສັດຈະທຳທີ່ສ່ອງແສງ - ເຖິງຄວາມເປັນຈິງດັ່ງກ່າວ ກໍ່ປ່ຽນແປງເຊັ່ນດຽວກັນ. ອາດຈະຍົກເອົາການເສີມຂະຫຍາຍທິດສະດີ ມາກ-ເລນິນ ກ່ຽວກັບການປະຕິວັດ ສັງຄົມນິຍົມ ນັ້ນມາເປັນຕົວຢ່າງ. ໃນເງື່ອນໄຂລັດທິທຶນນິຍົມກ່ອນສະໄໝນາຍທຶນຜູກຂາດ ຂໍ້ວິນິດໄສທີ່ມາກ ແລະ ອັງແກນ ໄດ້ຍົກຂຶ້ນມາກ່ຽວກັບຄວາມອາດ ເປັນໄປໄດ້

ຂອງການປະຕິວັດສັງຄົມນິຍົມຈະບັນລຸໄຊຊະນະໄດ້ໃນບັນດາປະເທດທຶນນິຍົມ-ສ່ວນຫລາຍທີ່ຂະຫຍາຍຕົວກວ່າໝູ່ ໃນເວລາພ້ອມໆ ກັນນັ້ນ ແມ່ນສັດຈະທຳ. ໃນເງື່ອນໄຂລັດທິຈັກກະພັດນິຍົມ, ຂໍ້ວິນິດໄສທີ່ ເລນິນ ໄດ້ຍົກຂຶ້ນມາວ່າ ໃນເບື້ອງຕົ້ນ ການປະຕິວັດສັງຄົມນິຍົມອາດຈະບັນລຸໄຊຊະນະໃນປະເທດໜຶ່ງຫລືໃນປະເທດຈຳນວນໜຶ່ງ ເຊິ່ງຄວາມຂັດແຍ່ງໃນບັນດາປະເທດດັ່ງກ່າວມີ ລັກສະນະຮ້າຍແຮງຫລາຍກວ່າໝູ່ນັ້ນ ໄດ້ກາຍເປັນສັດຈະທຳ. ທັງສອງຂໍ້ນີ້ລ້ວນແຕ່ແມ່ນສັດຈະທຳໂດຍສອດຄ່ອງກັບເງື່ອນໄຂຮູບປະທຳ. ຂໍ້ວິນິດໄສກ່ຽວ ກັບລັກສະນະຮູບປະທຳຂອງສັດຈະທຳນັ້ນ ແມ່ນສຳຄັນເປັນພິເສດສຳລັບການວາງທິດທາງການເມືອງ, ຍຸດທະສາດ ແລະ ຍຸດໂທບາຍຂອງພັກກອມມູນິດ ແລະ ພັກກຳມະກອນ, ອັນທີ່ກ່ຽວພັນກັບການປ່ຽນແປງຢ່າງໄວວາໃນສະຖານະການຕົວຈິງ, ໃນການຊັ່ງຊາກຳລັງລະຫວ່າງບັນດາຊົນຊັ້ນ ແລະ ອື່ນໆ.

ຈະໄຈ້ແຍກຄວາມຮູ້ທີ່ເປັນສັດຈະທຳກັບບໍ່ເປັນສັດຈະທຳແນວໃດ, ແມ່ນຫຍັງເປັນມາດຕະຖານ (ການວັດແທກ) ຂອງລັກສະນະສັດຈະທຳຂອງຄວາມຮູ້ຂອງພວກເຮົາ ? ປັດຊະຍາມາກ-ເລນິນຖືວ່າພຶດຕິກຳຕົວຈິງແມ່ນມາດ ຕະຖານຂອງສັດຈະທຳ. ພຶດຕິກຳຕົວຈິງແມ່ນພື້ນຖານພາວະວິໄສ ທີ່ອຳນວຍ ໃຫ້ໄຈ້ແຍກຄວາມຮູ້ແບບສັດຈະທຳຈາກການເຂົ້າໃຈທີ່ບໍ່ຖືກຕ້ອງ. ຂໍ້ວິນິດໄສ ພື້ນຖານຂອງລັດທິມາກວ່າດ້ວຍພຶດຕິກຳຕົວຈິງໃນຖານະເປັນມາດຕະຖານຂອງສັດຈະທຳນັ້ນໄດ້ສະເໜີອອກໃນນິພົນຂອງ ກ.ມາກ: "ຂໍ້ວິນິດໄສກ່ຽວກັບເຟເຢບາກ", ຂອງ ຟ.ອັງແກັນ: "ລູດວິກເຟເຢບາກ ແລະ ອະວະສານຂອງປັດຊະຍາ ກລາຊິກເຢຍລະມັນ" (ພາກທີ ສອງ) ແລະຂອງ ວ.ອີ.ເລນິນ : "ລັດທິວັດຖຸນິຍົມ ແລະ ລັດທິບົດຮຽນຕຳໜິວິພາກ"(ພາກທີ ສາມ, ຂໍ້ທີ ໖). ຄວນຄຳນຶງເຖິງເລື່ອງທີ່ວ່າ ມາດຕະຖານນີ້ບໍ່ແມ່ນເວລາໃດກໍ່ສາມາດຈະໝູນໃຊ້ໄດ້ໂດຍກົງ. ແຕ່ໃນທີ່ສຸດ ມີພຽງແຕ່ພຶດຕິກຳຕົວຈິງເທົ່ານັ້ນ ທີ່ຢັ້ງຢືນ ຫລື ປະຕິເສດຂໍ້ວິນິດໄສຂອງທິດສະດີນີ້ຫລືນັ້ນ. ເຊັ່ນຕົວຢ່າງ ລັກສະນະສັດຈະທຳຂອງລັດທິມາກ-ເລນິນ, ລັກສະນະໝັ້ນຄົງຖາວອນຂອງຫລັກການພື້ນຖານ ລັດທິມາກນັ້ນ ໄດ້ຮັບການຢັ້ງຢືນດ້ວຍການຕໍ່ສູ້ປະຕິວັດຂອງຊົນຊັ້ນກຳມະກອນແລະຊາວຜູ້ອອກແຮງງານທຸກຄົນ, ດ້ວຍການສ້າງຕັ້ງລະບົບສັງຄົມນິຍົມແຫ່ງໂລກ, ດ້ວຍການກໍ່ສ້າງສັງຄົມສັງຄົມນິຍົມທີ່ຂະຫຍາຍຕົວດ້ວຍຄວາມສຳເລັດ.

## ໔. ບົດບາດຂອງການສ່ອງແສງທາງອະໄວຍະຄວາມຮູ້ສຶກ ແລະ ຈິນຕະນາການຕັກກະສາດ ໃນຄວາມຮັບຮູ້

ຄົນຮັບເອົາຄວາມຮູ້ແບບສັດຈະທຳແນວໃດ, ຄວາມຮັບຮູ້ດຳເນີນ ໄປໂດຍໃຊ້ພາຫະນະຮັບຮູ້ໃດແດ່, ເສັ້ນທາງຄວາມຮັບຮູ້ເປັນຄືແນວໃດ, ເສັ້ນທາງຂອງການເຄື່ອນເໜັງຂອງສະຕິປັນຍາຂອງຄົນນັ້ນ ໄປສູ່ສັດຈະທຳແນວໃດ ? ຄຳຕອບຕໍ່ບັນຫາດັ່ງກ່າວນີ້ ວ.ອີ.ເລນິນ ໄດ້ໃຫ້ຄຳນິຍາມໄວ້ໃນ - "ສະໝຸດປັດຊະຍາ": "ເລີ່ມຈາກສຳຜັດຖານ ໄປສູ່ຈິນຕະນາການແບບນາມມະທຳ ແລະຈາກຈິນຕະນາການແບບນາມມະທຳໄປເຖິງພຶດຕິກຳຕົວຈິງນັ້ນ ຄືເສັ້ນທາງແບບສັດຈະວິພາກແຫ່ງຄວາມຮັບຮູ້ສັດຈະທຳ ແລະ ຄວາມເປັນ ຈິງແບບພາວະວິໄສ" ໑).

ສຳຜັດຖານໃນປັດຊະຍາມາກ-ເລນິນ ແມ່ນການສ່ອງແສງທາງອະໄວຍະອະຄວາມຮູ້ສຶກ ແລະ ຮູບແບບຂອງມັນ: ຄືຄວາມຮູ້ສຶກ, ການຮັບຮູ້, ການວາດພາບ. ການສ່ອງແສງດ້ວຍຄວາມຮູ້ສຶກນັ້ນຈຸດດັ່ງນີ້ ຍອມວ່າມັນໄດ້ຮັບ - ຄວາມຮູ້ກ່ຽວກັບໂລກຮອບຕົວໂດຍຜ່ານອະໄວຍະອະຄວາມຮູ້ສຶກ. ຄົນມີຫ້າອະໄວຍະອະຄວາມຮູ້ສຶກ: ການເບິ່ງເຫັນ(ຈັກຂຸວິນຍານ),ການຍິນສຽງ(ໂສຕະ-ວິນຍານ), ການດົມກິ່ນ (ຄານະວິນຍານ), ການສຳ ຜັດດ້ວຍຜິວໜັງ(ກາຍະວິນຍານ), ການຮູ້ລົດຊາດ (ຊິວຫາວິນຍານ). ຮູບແບບທີ່ໜຶ່ງແລະເປັນຮູບແບບທີ່ງ່າຍດາຍກວ່າໝູ່ຂອງການສ່ອງແສງທາງອະໄວຍະອະຄວາມ ຮູ້ສຶກນັ້ນ ແມ່ນຄວາມຮູ້ສຶກຂອງຄົນ. ຄວາມຮູ້ສຶກແມ່ນການສ່ອງແສງເຖິງບາງ ລັກສະນະສະເພາະ ບາງດ້ານຂອງສິ່ງວັດຖຸ ໂດຍຜ່ານອະໄວຍະອະຄວາມຮູ້ສຶກ. ມີຄວາມຮູ້ສຶກທາງຕາ, ທາງຫູ, ທາງດັງ, ທາງຜິວໜັງ ແລະ ທາງລີ້ນ - ເຊິ່ງແຕ່ລະອັນນັ້ນ ສ່ອງແສງເຖິງພຽງແຕ່ບາງລັກສະນະສະເພາະແລະ ບາງດ້ານຂອງສິ່ງວັດຖຸເທົ່ານັ້ນ. ເຊັ່ນຕົວຢ່າງ ຄົນຈຳແນກຮູບນອກ, ຂະໜາດ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ. ເຫຼັ້ມ ໔໙, ໜ້າ ໑໕໔-໑໕໓.

ແລະ ສີສັນຂອງສິ່ງວັດຖຸໂດຍຜ່ານທາງຕາ. ວ.ອີ.ເລນິນ ໄດ້ຮຽກຄວາມຮູ້ສຶກດັ່ງກ່າວນີ້ເປັນຮູບພາບແບບອັດຕະວິໄສຂອງໂລກພາວະວິໄສ, ທ່ານໄດ້ ເນັ້ນໜັກວ່າ ຕາມຮູບແບບຂອງມັນແລ້ວ ຄວາມຮູ້ສຶກແມ່ນແບບອັດຕະວິໄສ ແມ່ນຜະລິດຕະພັນຂອງມັນສະໝອງ ແລະ ລະບົບເສັ້ນປະສາດຂອງພວກເຮົາ ແຕ່ມັນເປັນລັກສະນະພາວະວິໄສດ້ານເນື້ອໃນ ເນື່ອງຈາກວ່າມັນສ່ອງແສງເຖິງລັກສະນະສະເພາະ ແລະ ຄຸນນະພາບຂອງສິ່ງວັດຖຸຕ່າງໆໃນໂລກຮອບຕົວ . ຄວາມຮູ້ສຶກມີບົດບາດອັນໃຫຍ່ຫລວງໃນຂະບວນວິວັດຄວາມຮັບຮູ້ ມັນຜູກພັນຄົນກັບໂລກ ແມ່ນຕົ້ນກຳເນີດຄວາມຮູ້ຂອງພວກເຮົາ ກ່ຽວກັບໂລກ.

ຄວາມຮັບຮູ້ແມ່ນຮູບພາບຂອງສິ່ງວັດຖຸເອົ້າລວມ. ມັນປະກົດຕົວຂຶ້ນໃນຈິດສຳນຶກຂອງຄົນບົນພື້ນຖານຄວາມຮູ້ສຶກ ແລະ ສ່ອງແສງເຖິງສິ່ງວັດຖຸທັງໝົດທີ່ກວມລວມເອົາທຸກດ້ານ, ທຸກລັກສະນະສະເພາະຂອງມັນ. ທັງຄວາມຮູ້ສຶກ , ທັງຄວາມຮັບຮູ້ໂດຍສະເພາະ ລ້ວນແຕ່ປະກົດຕົວຂຶ້ນໃນຈິດສຳນຶກ ຍ້ອນ ການເຄື່ອນໄຫວຢ່າງຕັ້ງໜ້າຂອງກະໂຕອະໄວຍະວະຄວາມຮູ້ສຶກເອງ. ເຊັ່ນ ຕົວຢ່າງໃນເມື່ອຮັບຮູ້ເອົາຮູບນອກຂອງສິ່ງວັດຖຸ ຕາຂອງຄົນຄືວ່າໄດ້ "ລູບຄຳ " ສິ່ງວັດຖຸ, ໃນຂະນະດຽວກັນນັ້ນ ຕາໄດ້ມີການເຄື່ອນເໜັງຢ່າງລະອຽດແລະຢ່າງຫລວງຫລາຍ.

ຮູບແບບທີ່ສູງຂອງການສ່ອງແສງທາງອະໄວຍະ ຄວາມຮູ້ສຶກນັ້ນແມ່ນການວາດພາບ.ການວາດພາບແມ່ນການສ່ອງແສງຄືນຮູບພາບຂອງສິ່ງວັດຖຸທີ່ໄດ້ຮັບຮູ້ມາກ່ອນນັ້ນ ໃນຈິດສຳນຶກ ເຊິ່ງໃນຂະນະນັ້ນສິ່ງວັດຖຸດັ່ງກ່າວບໍ່ໄດ້ກະທົບ ຕໍ່ອະໄວຍະວະຄວາມຮູ້ສຶກ. ຍ້ອນມີການວາດພາບ ຈິດສຳນຶກຂອງຄົນຈຶ່ງໄດ້ຮັບຄວາມເປັນເອກະລາດແບບທຽບຖານ, ມີຄວາມສາມາດໝູນໃຊ້ຮູບພາບ ດັ່ງກ່າວ ແລະ ກໍ່ສ້າງຮູບພາບໃໝ່ຂຶ້ນ. ໂດຍໃຊ້ການວາດພາບ ຄົນສາມາດກໍ່ສ້າງຮູບພາບຂອງສິ່ງວັດຖຸທີ່ບໍ່ມີໃນຕົວຈິງ, ວາດພາບເຖິງພາບອະນະຄົດ . ການວາດພາບດັ່ງນີ້ມີບົດບາດສຳຄັນໃນການເຄື່ອນໄຫວປະດິດສ້າງ ຂອງຄົນຕົວຢ່າງໃນວຽກງານຂອງນັກຂຽນ,ນັກແຕ້ມ, ນັກປະດິດສ້າງ ແລະ ອື່ນໆ.

ການສ່ອງແສງທາງອະໄວຍະ ຄວາມຮູ້ສຶກມີຂໍ້ຈຳກັດໃນດ້ານຄວາມ ສາມາດຂອງຕົນເອງ. ຈະໃຊ້ການສ່ອງແສງດັ່ງກ່າວເພື່ອມາໄຈ້ແຍກທາດແທ້ - ຂອງສິ່ງວັດຖຸ, ໄຈ້ແຍກບັນດາກົດເກນຂະຫຍາຍຕົວຂອງມັນນັ້ນ ແມ່ນບໍ່ໄດ້ .

ຈິນຕະນາການຕັກກະສາດ (ແບບນາມມະທຳ) ແລະ ບັນດາຮູບແບບຂອງມັນຄື: ສຳນຶກ, ການສັນນິຖານ ແລະ ການສະຫລຸບນັ້ນ ເປັນສິ່ງເພີ່ມຕື່ມໃຫ້ແກ່ການສ່ອງແສງດ້ວຍຄວາມຮູ້ສຶກ.

ສຳນຶກ ແມ່ນຮູບແບບຂອງແນວຄິດ ເຊິ່ງໃນນັ້ນໄດ້ສ່ອງແສງເຖິງ ລັກສະນະສະເພາະທີ່ສຳຄັນ ທີ່ເປັນທາດແທ້ຂອງສິ່ງວັດຖຸ ເປັນອັນລວມສຳລັບສິ່ງວັດຖຸຈຳພວກໜຶ່ງ. ສຳນຶກອາດມີລະດັບສັງລວມແຕກຕ່າງກັນ (ເຊັ່ນຕົວຢ່າງຕົ້ນແປກ, ຕົ້ນໄມ້, ພືດພັນ). ແຕ່ລະສຳນຶກ ລ້ວນແຕ່ໄດ້ໄຈ້ແຍກ ລັກສະນະ - ພາຍໃນ ແລະ ທີ່ເປັນຕົ້ນຕໍຂອງສິ່ງວັດຖຸ, ຕາມຫລັກການແລ້ວ ມັນບໍ່ ກ່ຽວຂ້ອງສະເພາະແຕ່ສິ່ງວັດຖຸດຽວ ແຕ່ຫາກກ່ຽວຂ້ອງສິ່ງວັດຖຸຈຳພວກໃດໜຶ່ງ - ເວົ້າລວມ. ຕົວຢ່າງສຳນຶກກ່ຽວກັບ "ຄົນ" ກ່ຽວຂ້ອງທຸກໆຄົນ ທີ່ດຳລົງຊີວິດຢູ່ໃນໂລກ ໂດຍບໍ່ຂຶ້ນກັບເຊື້ອຊາດ,ສະຖານທີ່ດຳລົງຊີວິດ,ພາສາ,ແລະອື່ນໆ. ມັນໄດ້ລວບລວມເອົາອັນລວມ ທີ່ຄົນມີຢູ່ນຳກັນເຊັ່ນ: ຄວາມສາມາດໃນ ດ້ານຈິນຕະນາການ, ການອອກແຮງງານ ແລະ ອື່ນໆ. ບົນພື້ນຖານສຳນຶກ ຈຶ່ງເກີດມີການສັນນິຖານ ແລະ ການສະຫລຸບ.

ການສັນນິຖານ ແມ່ນຮູບແບບແນວຄິດເຊິ່ງໃນນັ້ນ ອັນໃດໜຶ່ງຖືກ ຢັ້ງຢືນຫລືປະຕິເສດ. ໃນການສັນນິຖານມີການທ້ອນໂຮມເອົາສອງສຳນຶກຫລື ຫລາຍກວ່ານັ້ນ ເຊັ່ນຕົວຢ່າງ: ລັດທິຈັກກະພັດນິຍົມ ແມ່ນລັດທິທຶນນິຍົມຜູກຂາດ.ແຕ່ອີກດ້ານໜຶ່ງ ເນື້ອໃນຂອງແຕ່ລະສຳນຶກນັ້ນ ລ້ວນແຕ່ໄດ້ຮັບການໄຈ້ແຍກ ໃນການສັນນິຖານ. ຕົວຢ່າງກໍຄື ເພື່ອຈະໄຈ້ແຍກເນື້ອໃນຂອງສຳນຶກກ່ຽວກັບຈັກກະພັດນິຍົມນັ້ນ ວ.ອີ.ເລນິນ ໄດ້ຍົກຫາລັກສະນະພິເສດຂອງລັດທິຈັກກະພັດນິຍົມຂຶ້ນມາ. ການສັນນິຖານ ມີການຕິດພັນເຊິ່ງກັນ ແລະ ກັນ ແລະ ປະກອບເປັນຮູບແບບຈິນຕະນາການຕໍ່ໄປ ຄືການສະຫລຸບ.

ການສະຫລຸບ ແມ່ນສາຍພົວພັນລະຫວ່າງການສັນນິຖານສອງປະການ ຫລືຫລາຍກວ່ານັ້ນ ເຊິ່ງໃນນັ້ນມີການຖອດຖອນເອົາຂໍ້ສະ ຫລຸບອອກມາ ດ້ວຍ-ຄວາມຈຳເປັນ. ຕາມຮູບການ ການສະຫລຸບອາດຈະເປັນແບບອະນຸມານແລະແບບອຸປະມານ. ໃນການສະຫລຸບແບບອະນຸມານນັ້ນ ການສະຫລຸບສະເພາະຖອດຖອນອອກຈາກການສັນນິຖານລວມ. ກົງກັນຂ້າມໃນການສະຫລຸບແບບ ອຸປະມານນັ້ນການສະຫລຸບລວມຖອດຖອນອອກຈາກການສັນນິຖານສະເພາະ.

ໃນຂະບວນວິວັດແຫ່ງຄວາມຮັບຮູ້ຕົວຈິງ ການສ່ອງແສງດ້ວຍຄວາມ ຮູ້ສຶກ ແລະ ຈິນຕະນາການ ຕັກກະສາດ ນອນຢູ່ໃນຄວາມເປັນເອກະພາບຢ່າງ ຕັດຂາດອອກຈາກກັນບໍ່ໄດ້.

ມັນສະແດງອອກຢູ່ບ່ອນວ່າ ຮູບພາບຄວາມຮູ້ສຶກຂອງຄົນ ເວລາໃດກໍ່ ຖືກສຳນຶກອອກ ແລະ ຮັບຮູ້ໄດ້. ແນ່ນອນລະດັບຮັບຮູ້ຂອງພວກມັນອາດຈະ ແຕກຕ່າງກັນ. ຕົວຢ່າງ ການຮັບຮູ້ເຄື່ອງຈັກໃນໂຮງງານຂອງນັກຊ່ຽວຊານ ນັກວິສະວະກອນ, ແລະຂອງຄົນຜູ້ທີ່ເຂົ້າໂຮງງານເປັນຄັ້ງທຳອິດຈະແຕກຕ່າງກັນ. ສຳລັບນັກວິສະວະກອນແລ້ວ ຮູບພາບຂອງເຄື່ອງຈັກພົວພັນຢ່າງບໍ່ຂາດສາຍກັບຄວາມຮູ້ກ່ຽວກັບບັນຫາທີ່ວ່າ ເຄື່ອງຈັກນີ້ເຄື່ອນໜູນແນວໃດ. ຄົນຜູ້ທີ່ ເຫັນເຄື່ອງຈັກນີ້ເປັນຄັ້ງທຳອິດ ຈະຮັບຮູ້ເອົາລັກສະນະສະເພາະແລະຈຸດພິເສດຮູບນອກຂອງມັນນັ້ນເປັນຕົ້ນຕໍ. ແຕ່ ທັງຈິນຕະນາການນາມມະທຳ ກໍ່ຕ້ອງ ອີງໃສ່ຮູບພາບຄວາມຮູ້ສຶກຂອງບັນດາສິ່ງວັດຖຸ ແລະ ປະກົດການທີ່ໄດ້ຮັບຄົ້ນຄວ້ານັ້ນເຊັ່ນດຽວກັນ. ວິທະຍາສາດສະໄໝໃໝ່ມັກຈະຄົ້ນຄວ້າ ເປົ້າໝາຍ ທີ່ບໍ່ສາມາດຈະຮັບຮູ້ທາງອະໄວຍະວະຄວາມຮູ້ສຶກໄດ້. ໃນກໍລະນີດັ່ງນີ້ບັນດານັກປາດໄດ້ປະດິດສ້າງຮູບພາບແບບພິເສດ ທີ່ຮຽກກັນວ່າເປັນຮູບພາບ-ແບບ ສັນຍະລັກ. ເຊັ່ນຕົວຢ່າງ ເພື່ອວາດພາບດ້ວຍອະໄວຍະວະຄວາມຮູ້ສຶກ ກ່ຽວກັບປະລະມານູ ແລະ ໂຄງປະກອບຂອງມັນແລ້ວ ໃນວັດຖຸວິທະຍາໄດ້ມີການສ້າງຕັ້ງແບບສັນຍະລັກ ປະລະມານູ.

## ໕. ວິທີຮັບຮູ້ແບບວິທະຍາສາດ

ຄົ້ນພົບທາດແທ້, ຮັບຮູ້ກົດເກນນັ້ນຄືໜ້າທີ່ຂອງວິທະຍາສາດ. ເພື່ອຈຸດ-ປະສົງນີ້ ວິທະຍາສາດມີວິທີ ແລະ ພາຫະນະຂອງຕົນ. ວິທີອັນລວມທົ່ວ ໄປຂອງຄວາມຮັບຮູ້ທາງວິທະຍາສາດນັ້ນ ແມ່ນສັດຈະວິພາກວັດຖຸນິຍົມ. ວິທີ ໄດ້ຮັບການນຳໃຊ້ທັງຢູ່ໃນວິທະຍາສາດທຳມະຊາດ ແລະ ຢູ່ໃນວິທະຍາສາດ ສັງຄົມ. ວິທີຂອງວິທະຍາສາດຕົວຈິງ ໄດ້ຮັບການເສີມຂະຫຍາຍຂຶ້ນມາບົນ ພື້ນຖານການຮຽນຮູ້ສັດຈະວິພາກວັດຖຸນິຍົມ. ມີຫລາຍວິທີ ທີ່ໄດ້ຮັບການໝູນ ໃຊ້

ເຂົ້າໃນວິທະຍາສາດຫລາຍຂະແໜງ ໃນເມື່ອຄົ້ນຄວ້າຂົງເຂດຕ່າງໆ ຂອງຄວາມເປັນຈິງ. ວິທີດັ່ງກ່າວ ແມ່ນວິທີວິທະຍາສາດລວມ. ໃນນັ້ນລວມມີການສັງເກດ ແລະ ການທົດລອງ, ການວິໄຈ ແລະ ສັງລວມ, ວິທີອະນຸມານ - ແລະ ອຸປະມານ, ສົມມຸດຕິຖານ ແລະ ການຄາດຄະເນແບບວິທະຍາສາດ, ວິທີແບບປະຫວັດສາດ ແລະ ຕັກກະສາດ, ວິທີສ້າງແບບສັນຍະລັກ, ວິທີແບບມີລະບົບ.

ການສັງເກດ ແມ່ນການຮັບຮູ້ສິ່ງວັດຖຸ ແລະ ປະກົດການຂອງໂລກຮອບ-ຕົວແບບຍາວນານ, ມີຈຸດມຸ່ງໝາຍ ແລະ ມີແຜນການ, ມັນດຳເນີນໄປຢ່າງມີລະບົບ ແລະ ມີແຜນການ, ເວລາໃດກໍ່ມີຈຸດປະສົງອັນແນ່ນອນ. ສຳລັບ - ຄວາມຮັບຮູ້ແບບ ມີວິທະຍາສາດແລ້ວ ບໍ່ພຽງແຕ່ສາມາດສັງເກດເປົ້າໝາຍທີ່ຄົ້ນຄວ້າ, ແຕ່ຫາກຍັງຕ້ອງຮູ້ຈັກວາດພາບມັນ ໝາຍຄວາມວ່າ ຮູ້ຈັກບັນທຶກ-ຈຸດພິເສດ ແລະ ລັກສະນະສະເພາະຂອງສິ່ງວັດຖຸດັ່ງກ່າວ ທີ່ໄດ້ຄົ້ນພົບໃນເວລາສັງເກດ. ການບັນທຶກດຳເນີນໄປ ໂດຍໃຊ້ກຳມະວິທີວິທະຍາ. ການ ສັງເກດໄດ້ຮັບການນຳໃຊ້ໃນບັນດາວິທະຍາສາດ ເຊັ່ນພືດສາດ, ສັດຕະວະສາດ, ປະຫວັດສາດຢ່າງກວ້າງຂວາງ. ການສັງເກດ ແລະ ການບັນທຶກຕິດພັນຢ່າງແໜ້ນແຟ້ນກັບການທົດລອງ.

ການທົດລອງ ແມ່ນການທົດລອງວິທະຍາສາດ ເພື່ອເຮັດໃຫ້ເປົ້າ ໝາຍປະກົດຕົວຄືນໃໝ່, ຫລືວ່າວາງໃຫ້ເປົ້າໝາຍຕົກໃນເງື່ອນໄຂທີ່ໄດ້ ກະຕວງໄວ້ກ່ອນນັ້ນຢ່າງຈັດເຈນ, ອັນທີ່ຊ່ວຍໃຫ້ສາມາດຄົ້ນຄວ້າຜົນສະທ້ອນ ຂອງເງື່ອນໄຂດັ່ງກ່າວ ຕໍ່ເປົ້າໝາຍລວມໆ. ການທົດລອງສາມາດຈະລົ້ມຄືນ ໄດ້ຫລາຍເທື່ອ, ປັບປຸງກຳມະວິທີຂອງມັນໄດ້ສົມບູນຂຶ້ນ. ການທົດລອງອາດແມ່ນດ້ານວິທະຍາສາດທຳມະຊາດ, ດ້ານອຸດສາຫະກຳແລະດ້ານສັງຄົມ, ຕົວຢ່າງກໍ່ຄືອງໃສ່ການທົດລອງດ້ານສັງຄົມເພື່ອຄົ້ນຄວ້າຮູບແບບຕ່າງໆຂອງການຄຸ້ມຄອງການຜະລິດ, ຄົ້ນຄວ້າເສັ້ນທາງ ແລະ ພາຫະນະເພື່ອເພີ່ມທະວີສະມັດ ຖະພາບຂອງງານ, ຄົ້ນຄວ້າກົດເກນສັງຄົມທີ່ແນ່ນອນ, ຄົ້ນຄວ້າກົນໄກການ ກະທົບຂອງກົນເກນດັ່ງກ່າວ ແລະ ຜົນທີ່ຈະຕິດຕາມມາ.

ການວິໄຈ ແມ່ນການແຍກສິ່ງວັດຖຸອອກເປັນສ່ວນປະກອບຂອງມັນ ໃນຕົວຈິງ ຫລືໃນຄວາມຄິດ ໂດຍຜ່ານການວິໄຈຈຸດພິເສດສະເພາະຂອງສິ່ງວັດຖຸຫລື

ປະກົດການຖືກແຍກອອກ ແລະ ໄດ້ຮັບການຄົ້ນຄວ້າ ອັນຊ່ວຍໃຫ້ສາມາດຄົ້ນຄວ້າໂຄງປະກອບຂອງມັນ, ແຍກຈຸດພິເສດທີ່ເປັນທາດແທ້ອອກຈາກອັນບໍ່ເປັນທາດແທ້.

ການສັງລວມ ແມ່ນການທ້ອນໂຮມພາກສ່ວນທັງຫມົດທີ່ໄດ້ແຍກອອກ ໂດຍຜ່ານການວິໄຈນັ້ນໃນຕົວຈິງ ຫລືໃນຄວາມຄິດ. ໃນວິທະຍາສາດສັງຄົມ ກ່ອນອື່ນຫມົດແມ່ນມີການນຳໃຊ້ການວິໄຈ ແລະ ການສັງລວມດ້ານທິດສະດີ, ສ່ວນວິທະຍາສາດທຳມະຊາດນຳໃຊ້ໃນພຶດຕິກຳ ຕົວຈິງ.

ເຊັ່ນຕົວຢ່າງ ມີຄວາມຈຳເປັນຕ້ອງຄົ້ນຄວ້າສ່ວນປະກອບເຄມີຂອງ ວັດຖຸໃດຫນຶ່ງ. ເພື່ອຈຸດປະສົງນີ້ ຕ້ອງຫມູນໃຊ້ການວິໄຈເຄມີເພື່ອແຍກວັດຖຸ ດັ່ງກ່າວອອກເປັນສ່ວນປະກອບ ຄືທາດເຄມີ. ໂດຍຜ່ານການສັງລວມເຄມີເພິ່ນສາມາດປະດິດສ້າງສິ່ງວັດຖຸໃຫມ່, ລວມທັງສິ່ງ ວັດຖຸທີ່ບໍ່ມີໃນທຳມະຊາດ ແຕ່ຫາກມີຄວາມຕ້ອງການໃນອຸດສາຫະກຳ, ໃນການ ຜະລິດ.

ວິທີອຸປະມານນັ້ນ ຕາມຫລັກການແລ້ວ ອີງໃສ່ການສັງເກດ ແລະ ການທົດລອງ. ໂດຍອີງໃສ່ການຊ່ວຍເຫລືອຂອງວິທີດັ່ງກ່າວ ໄດ້ມີການຄົ້ນຄວ້າສາຍພົວພັນທາງເຫດຜົນໃນທຳມະຊາດ ແລະ ໃນສັງຄົມ. ເພື່ອຈຸດປະສົງນີ້ ຕາມຫລັກ ອັນແນ່ນອນ ມີການຄັດເລືອກເອົາກໍລະນີພິເສດ ແລະ ສະຫລຸບ ເອົາເຫດຜົນທີ່ໄດ້ຄາດຄະເນໄວ້. ຫລັງຈາກນັ້ນຂໍ້ສະຫລຸບດັ່ງກ່າວຈະໄດ້ຮັບ ການກວດກາຄືນໃນພຶດຕິກຳຕົວຈິງ, ໃນການທົດລອງ.

ວິທີອະນຸມານ ໄດ້ຮັບການຫມູນໃຊ້ສຳລັບກໍ່ຕັ້ງທິດສະດີວິທະຍາສາດ ໃນ-ຄະນິດສາດ, ວັດຖຸວິທະຍາ ແລະ ໃນບັນດາວິທະຍາສາດຊັດເຈນອື່ນໆ. ໃນກໍລະນີນີ້ມີການນຳໃຊ້ຫລັກການພື້ນຖານ ແລະ ຂໍ້ວິນິດໄສທາງທິດສະດີ, ຈາກ-ນັ້ນສະຫລຸບເນື້ອໃນທັງຫມົດຂອງທິດສະດີຕາມຫລັກຕັກກະສາດ ແລະ ກົດເກນທີ່ແນ່ນອນ.

ສົມມຸດຕິຖານ ແມ່ນການຄາດຄະເນທີ່ມີວິທະຍາສາດ ທີ່ບໍ່ໄດ້ຮັບການພິສູດດ້ວຍພຶດຕິກຳຕົວຈິງເທື່ອ. ຄວາມຮູ້ໄດ້ຮັບການຂະຫຍາຍຕົວເປັນປະຈຳ. ໃນວິທະຍາສາດມີເຫດການຕົວຈິງໃຫມ່ເກີດຂຶ້ນ ເຊິ່ງບໍ່ສາມາດຈະອະທິບາຍດ້ວຍທິດສະດີເກົ່າ. ເພື່ອຈຸດປະສົງນີ້ ມີການຕັ້ງສົມມຸດຕິຖານຂຶ້ນ ເຊິ່ງໃນນັ້ນ ບົນພື້ນຖານ ເຫດການຕົວຈິງໃຫມ່ ໄດ້ສະຫລຸບກ່ຽວກັບການຄົງຢູ່ຂອງເປົ້າຫມາຍ

ໃໝ່ ແລະ ສາຍພົວພັນລະຫວ່າງພວກມັນ, ກ່ຽວກັບສາຍເຫດທີ່ພາໃຫ້ພວກມັນປະກົດຕົວຂຶ້ນມາ ແລະ ກົດເກນການຂະຫຍາຍຕົວຂອງພວກມັນ. ເພື່ອ ກວດກາສົມມຸດຕິຖານນັ້ນ ມີການຖອດຖອນເອົາຜົນຕົວຈິງອອກຈາກສົມມຸດຕິຖານຊຶ່ງຈະພິສູດດ້ວຍການທົດລອງໃນຂັ້ນຕໍ່ໄປ. ໃນເມື່ອສົມມຸດຕິຖານໄດ້ຮັບຮອງເອົາແລ້ວ, ມັນກໍຈະໄດ້ຮັບການສຶກສາຄົ້ນຄວ້າຕໍ່ໄປ ແລະ ກາຍເປັນທິດສະດີ. ສົມມຸດຕິຖານອາດຈະເປັນສົມມຸດຕິຖານທີ່ຖືກຕ້ອງ ຫລືອາດຈະເປັນສົມມຸດຕິຖານທີ່ຜິດພາດ.

ການຄາດຄະເນຢ່າງມີວິທະຍາສາດ ແມ່ນການກະຕວງລ່ວງໜ້າວ່າແມ່ນຫຍັງຈະເກີດຂຶ້ນຫລືຈະໄດ້ຄົ້ນພົບໃນອະນາຄົດ ໂດຍອີງໃສ່ຄວາມຮັບຮູ້ ກົດເກນຂອງໂລກພາວະວິໄສ. ຕົວຢ່າງ ການຄາດຄະເນຢ່າງມີວິທະຍາສາດກໍຄືການຄາດຄະເນປະກົດການສຸ ລິຍະຄາດ (ກົບກິນຕາເວັນ) ແລະ ຈັນທະ - ຄາດ (ກົບກິນເດືອນ). ໜຶ່ງໃນປະເພດການຄາດຄະເນຢ່າງມີວິທະຍາສາດແມ່ນການຄາດຄະເນ ທີ່ແກ້ໄຂໜ້າທີ່ຕົວຈິງທີ່ແຄບກວ່າ. ຕົວຢ່າງກໍຄື ການຄາດຄະເນຈຳນວນປະຊາກອນນັ້ນ ໄດ້ກຳນົດດ້ວຍທ່າອຽງການເຕີບໃຫຍ່ຂອງພົນລະເມືອງໃນອະນາຄົດບົນພື້ນຖານການໄຈ້ແຍກ ຂໍ້ມູນກ່ຽວກັບອັດຕາ ສ່ວນຂອງການຕາຍ ແລະ ການເກີດ, ກ່ຽວກັບຈຳນວນຄົນເຂົ້າມາຢູ່ໃນເມືອງ - ແລະ ຄົນໜີອອກໄປ ຢູ່ຕ່າງປະເທດໃນປະຈຸບັນ.

ສັດຈະວິພາກໄຈ້ແຍກທຸກສິ່ງວັດຖຸ ແລະ ປະກົດການຂອງຄວາມເປັນ ຈິງໃນການຂະຫຍາຍຕົວ. ເພິ່ນສາມາດຄົ້ນຄວ້າຂະບວນວິວັດແຫ່ງການຂະຫຍາຍຕົວດ້ວຍວິທີທາງປະຫວັດສາດ ແລະ ແບບຕັກກະສາດ. ວິທີທາງປະຫວັດສາດທວນຄືນ ການຂະຫຍາຍຕົວດ້ານປະຫວັດສາດໃນຕົວຈິງຢ່າງລະອຽດ. ເຊັ່ນຕົວຢ່າງທຸກວິທະຍາສາດກ່ຽວກັບປະຫວັດສາດລ້ວນແຕ່ໝູນໃຊ້ວິທີນີ້. ວິທີແບບຕັກກະສາດ ທວນຄືນຈຸດພິເສດທີ່ສຳຄັນ ແລະ ຕົ້ນຕໍຂອງປະຫວັດສາດ, ມັນສ່ອງແສງຂະບວນວິວັດທາງປະຫວັດສາດຢ່າງສັງລວມ. ກ.ມາກ ໄດ້ໝູນໃຊ້ວິທີນີ້ໃນປຶ້ມ "ທຶນ" ໃນໄລຍະສຶກສາຄົ້ນຄວ້າແບບວິທີການຜະລິດທຶນນິຍົມ. ໃນຄວາມຮັບຮູ້ຢ່າງມີວິທະຍາສາດ ວິທີດັ່ງກ່າວໄດ້ຮັບການໝູນໃຊ້ໃນຄວາມເປັນເອກະພາບ ແລະ ການ ພົວພັນເຊິ່ງກັນ ແລະ ກັນ.

ວິທີສ້າງແບບສົມຍະລັກ ໄດ້ຮັບການແຜ່ຂະຫຍາຍຢ່າງກວ້າງຂວາງໃນ ວິ

ທະຍາສາດສະໄໝໃໝ່. ວິທີນີ້ມີເນື້ອໃນດັ່ງຕໍ່ໄປນີ້: ເມື່ອຄົ້ນຄວ້າປະກົດ - ການທີ່ກ່ຽວຂ້ອງເພິ່ນສ້າງແບບສັນຍະລັກຂອງມັນ, ດຳເນີນການຄົ້ນຄວ້າ ກົດເກນທີ່ແນ່ນອນຕາມແບບສັນຍະລັກນີ້ ຫລັງຈາກນັ້ນຜົນຂະຫຍາຍອອກໄປສູ່ ກະໂຕປະກົດການນັ້ນເອງ, ແບບສັນຍະລັກສາມາດເປັນແບບວັດຖຸ, (ເຊັ່ນແບບຢ່າງເຮືອບິນ, ແບບຢ່າງເຂື່ອນ ແລະ ອື່ນໆ) ແລະ ແບບໃນມະໂນພາບ , ແບບນຶກຄິດເອົາ (ເຊັ່ນແບບສັນຍະລັກຂອງປະລະມານູ, ຫລັກສູດຄະນິດສາດ ແລະອື່ນໆ), ຍັງມີທັງແບບຢ່າງຊິແບັກເນຕິກ ທີ່ທອນຄືນໜ້າທີ່ຈິນຕະນາການຫລາຍປະການຂອງຄົນ.

ໃນກາງສະຕະວັດທີ ໒໐ ທັດສະນະແບບເປັນລະບົບສຳລັບຄົ້ນຄວ້າ ເປົ້າໝາຍທີ່ສັບສົນ (ໃນຊີວະສາດ,ໃນບັນດາວິທະຍາສາດສັງຄົມ) ນັ້ນໄດ້ ຮັບການແຜ່ຂະຫຍາຍຢ່າງກວ້າງຂວາງໃນວິທະຍາສາດ. ທັດສະນະນີ້ໃຊ້ ແຍກ-ເປົ້າໝາຍຂອງການຄົ້ນຄວ້ານັ້ນຄືກັນກັບລະບົບທີ່ປະກອບດ້ວຍບັນດາສ່ວນ ປະກອບ, ມີໂຄງຮ່າງອັນແນ່ນອນ (ມີການພົວພັນຢ່າງໝັ້ນທ່ຽງລະຫວ່າງບັນດາສ່ວນປະກອບ) ແລະ ປະຕິບັດໜ້າທີ່ອັນແນ່ນອນ. ທັດສະນະດັ່ງນີ້ຮັບປະ ກັນໃຫ້ແກ່ການຄົ້ນຄວ້າເປົ້າໝາຍ, ໂຄງປະກອບພາຍໃນ ແລະ ການປະຕິ ບັດໜ້າທີ່ຂອງມັນຢ່າງເລິກເຊິ່ງກວ່າ.

ລັດທິສັງຄົມນິຍົມຂະຫຍາຍຕົວຂຶ້ນ ບົນພື້ນຖານການໝູນໃຊ້ກົດເກນພາວະວິໄສຂອງທຳມະຊາດ ແລະ ສັງຄົມຢ່າງມີສະຕິ. ດ້ວຍເຫດນັ້ນ ຄວາມ ຮັບຮູ້ແບບວິທະຍາສາດ ບັນດາກົດເກນດັ່ງກ່າວນີ້ ຈຶ່ງແມ່ນເງື່ອນໄຂທີ່ຈຳເປັນ ສຳລັບການຄາດຄະເນ, ການວາງແຜນການ ແລະ ການຄຸ້ມຄອງໃນສັງຄົມ ສັງຄົມນິຍົມ.

## ພາກທີ ເຈັດ

## ການຕຳໜິວິຈານ ປັດຊະຍານາຍທຶນສະໄໝໃໝ່

ໃນການຕໍ່ສູ້ລະຫວ່າງແນວຄິດສັງຄົມນິຍົມ ແລະ ແນວຄິດນາຍທຶນ ໃນຍຸກສະໄໝນີ້, ບັນຫາກ່ຽວກັບໂລກະທັດ ແລະ ປັດຊະຍານັບມື້ນັບມີຄວາມສຳຄັນສະເພາະໜ້າ. ບັນດານັກແນວຄິດນາຍທຶນ ຈັກກະພັດນິຍົມ ຕ້ານຫລັກມູນຕ່າງໆ ທີ່ສຳຄັນຂອງປັດຊະຍາ ມາກ-ເລນິນ ກ່ຽວກັບຄວາມເປັນເອກະພາບດ້ານວັດຖຸຂອງໂລກ, ກ່ຽວກັບການຂະຫຍາຍຕົວແບບສັດຈະວິພາກຂອງມັນ, ກ່ຽວກັບຄວາມອາດສາມາດທີ່ຈະຮັບຮູ້ຄວາມເປັນຈິງທີ່ຢູ່ຮອບຕົວຄົນ. ພວກເຂົາດຳເນີນສົງຄາມແນວຄິດຕ້ານຄວາມເຂົ້າໃຈ ແບບວັດຖຸນິຍົມ ກ່ຽວກັບປະຫວັດສາດ, ຕ້ານການຮັບຮູ້ກົດເກນພາວະວິໄສໃນທຳມະຊາດ ແລະ ສັງຄົມ, ຕ້ານແນວຄິດກ້າວໜ້າ ທາງສັງຄົມ, ປະຕິເສດບົດບາດຂອງມະຫາຊົນ ຊາວ ຜູ້ອອກແຮງງານ ໃນຖານະເປັນຜູ້ສ້າງປະຫວັດສາດ ທີ່ແທ້ຈິງ. ການຕໍ່ສູ້ ຕ້ານປັດຊະຍານາຍທຶນ ສະໄໝໃໝ່ນີ້ ປະກອບເປັນໜຶ່ງໃນຈຳນວນໜ້າທີ່ສຳຄັນຂອງບັນດານັກປັດຊະຍາລັດທິມາກ.

### ໑. ວິກິດການຂອງປັດຊະຍານາຍທຶນ

ການຂະຫຍາຍຕົວຂອງໂລກນາຍທຶນ ໄດ້ຢັ້ງຢືນຢ່າງໜັກແໜ້ນ ເຖິງຄວາມຖືກຕ້ອງຂອງຂໍ້ສະຫລຸບຂອງບັນດາພັກ ມາກ-ເລນິນ ກ່ຽວກັບເລື່ອງ ທີ່ວ່າ ວິກິດການຮອບດ້ານຂອງທຶນນິຍົມ ນັບມື້ເລິກເຊິ່ງ. ວິກິດການນີ້ໄດ້ ສະແດງອອກໃນທຸກງອົງເຂດຂອງຊີວິດໃນສັງຄົມ ທຶນນິຍົມ ໝາຍຄວາມວ່າ ໃນ

ດ້ານເສດຖະກິດ, ການເມືອງ ແລະ ຈິດໃຈ.

ໃນຂົງເຂດເສດຖະກິດທຶນນິຍົມ ອັນນີ້ແມ່ນວິກິດການດ້ານວັດຖຸດິບ, ພະລັງງານ ແລະ ເງິນຕາ, ຜົນຂອງວິກິດການດັ່ງກ່າວນີ້ ກໍຄື ການຜະລິດບໍ່ສົມສ່ວນ ແລະ ຫັນໄປຮັບໃຊ້ການທະຫານ, ຄວາມຂັດແຍ່ງທີ່ສຳຄັນ ທີ່ສຸດ ລະຫວ່າງແຮງງານ ແລະ ທຶນນັ້ນກໍນັບມື້ເລິກເຊິ່ງ.

ວິກິດການຮອບດ້ານຂອງທຶນນິຍົມໃນດ້ານການເມືອງ ສະແດງອອກໃນການເພີ່ມທະວີການຕໍ່ສູ້ຊົນຊັ້ນ ລະຫວ່າງຊົນຊັ້ນກຳມະກອນ ກັບນາຍທຶນ, ລະຫວ່າງບັນດາປະເທດທຶນນິຍົມ ກັບບັນດາປະເທດທີ່ຕໍ່ສູ້ເພື່ອຄວາມເປັນເອກະລາດແຫ່ງຊາດ, ສະແດງອອກໃນວິກິດການຂອງລະບອບປະຊາທິປະໄຕ ນາຍທຶນ. ຈຳນວນປະເທດທີ່ຫລຸດພົ້ນອອກຈາກກົງໂຄຈອນຂອງໂລກນາຍທຶນນັ້ນນັບມື້ນັບຫລາຍຂຶ້ນ. ພາຍຫລັງທີ່ຍາດເອົາຄວາມເປັນເອກະລາດ ທາງດ້ານການເມືອງແລ້ວ ຫລາຍປະເທດໃນຈຳນວນດັ່ງກ່າວ ໄດ້ກ້າວຂຶ້ນສູ່ເສັ້ນທາງ ຂະຫຍາຍຕົວທີ່ບໍ່ແມ່ນແບບທຶນນິຍົມ, ປະກາດນະໂຍບາຍການເມືອງເດີນໄປຕາມທິດທາງສັງຄົມນິຍົມ ແລະ ກ້າວຂຶ້ນສູ່ການກໍ່ສ້າງສັງຄົມໃໝ່.

ວິກິດການທາງດ້ານຈິດໃຈ, ສິນທຳ ແລະ ສິລະປະ, ວິກິດການຂອງແນວຄິດນາຍທຶນເວົ້າລວມ ລວມທັງວິກິດການດ້ານປັດຊະຍານັ້ນ ແມ່ນການ ສ່ອງແສງເຖິງວິກິດການຮອບດ້ານ ຂອງທຶນນິຍົມ ໃນຂົງເຂດເສດຖະກິດແລະການເມືອງ.

ລັກສະນະພິເສດຂອງປັດຊະຍາຂອງພວກນາຍທຶນສະໄໝໃໝ່ ທີ່ຕີລາຄາສະພາບການໃນປະຈຸບັນ ແລະ ສະແດງເຖິງວິກິດການຂອງມັນນັ້ນ ເປັນ ຄືແນວໃດ ?

ເນື້ອໃນຕົ້ນຕໍຂອງທຸກໆທິດສະດີ ປັດຊະຍາຈັກກະພັດນິຍົມນັ້ນ ແມ່ນລັດທິ-ຕ້ານກອມມູນິດ ໝາຍຄວາມວ່າເປັນສັດຕູຢ່າງເປີດເຜີຍ ຫລືຢ່າງປິດລັບຕໍ່ປັດຊະຍາມາກ-ເລນິນ, ຕໍ່ລັດທິວັດຖຸນິຍົມສັດຈະວິພາກ ທີ່ໄດ້ພິສູດຢ່າງມີວິທະຍາສາດ ເຖິງການພັງທະລາຍຂອງລັດທິທຶນນິຍົມ ແລະ ການປ່ຽນແທນມັນ ດ້ວຍລະບອບສັງຄົມໃໝ່ ຄືລະບອບສັງຄົມນິຍົມ ແລະ ກອມມູນິດນິຍົມ.

ໃນການແກ້ໄຂບັນຫາພື້ນຖານຂອງປັດຊະຍາ ບັນດານັກປັດຊະຍານາຍທຶນຢືນຢູ່ໃນທັດສະນະ ລັດທິຈິດຕະນິຍົມ ແລະ ລັດທິອະວິຊາ. ພວກເຂົາສົ່ງ ໃສ

ໃນຄວາມຖືກຕ້ອງຂອງຂໍ້ວິນິດໄສໃນປັດຊະຍາ ມາກ-ເລນິນ ທີ່ວ່າ ວັດຖຸມີມາກ່ອນ ແລະ ຈິດສຳນຶກມີມາທີຫລັງ ລວມທັງສິງໃສໃນການແກ້ໄຂບັນຫາກ່ຽວກັບຄວາມສາມາດຈະຮັບຮູ້ ຄວາມເປັນຈິງຮອບຕົວຂອງຄົນ. ໃນການໄຕ່ຕອງບັນຫາປັດຊະຍາ ພວກເຂົາມີທ່າອຽງໄປສູ່ລັດທິ ເທວະລະທັດ [໑], ລັດທິສຳຜັດໂດຍກົງ [໒], ລັດທິ ໄຮ້ຕັກປັນຍານິຍົມ [໓], ແລະ ລັດທິ ຄະນະສົງ [໔].

ພຶດຕິກຳຕົວຈິງດ້ານປະຫວັດສາດ-ສັງຄົມ, ຜົນສຳເລັດຂອງວິທະຍາສາດສະໄໝໃໝ່ ໄດ້ທັກລ້າງການເສກສັນປັ້ນແຕ່ງຂອງບັນດານັກປັດຊະຍາ - ນາຍທຶນ, ແລະ ໄດ້ຢືນ ຢັນຄວາມຖືກຕ້ອງຂອງຂໍ້ສະຫລຸບທີ່ບັນດານັກປັດຊະຍາມາກ-ເລນິນ ໄດ້ຍົກຂຶ້ນມາ ກ່ຽວກັບເລື່ອງທີ່ວ່າ ທຳມະຊາດ ແລະ ໂລກ

---

໑) ລັດທິເທວະລະທັດ ແມ່ນທັດສະນະແບບຈິດຕະນິຍົມ-ສາດສະໜາກ່ຽວກັບຄວາມເປັນຈິງ, ເຊິ່ງພື້ນຖານຂອງມັນປະກອບດ້ວຍຄວາມເຊື່ອຖືອຳນາດ ມະຫັດສະຈັນ. ບັນດານັກປັດຊະຍາ ເທວະລະທັດ ຖືເລື່ອງທີ່ເອີ້ນວ່າຄວາມຮູ້ສຶກໂດຍກົງແບບເທວະລະທັດ ແລະ ມະຫັດສະຈັນ ເຊິ່ງໄດ້ ຢືນຢັນເຖິງລັກສະນະມືວິນຍານເປັນພື້ນຖານຕົ້ນຕໍຂອງໂລກ ຄືພະເຈົ້ານັ້ນ ເປັນຮູບການສູງ ສຸດຂອງຄວາມຮັບຮູ້.

໒) ລັດທິສຳຜັດໂດຍກົງ ຕ້ານຢັນສະຕິປັນຍາດ້ວຍການສຳຜັດໂດຍກົງທີ່ຖືເປັນຄືຄວາມສາມາດອັນມະຫັດສະຈັນຂອງຈິດສຳນຶກ ໃນຄວາມຮັບຮູ້ໂລກໂດຍ ປາສະຈາກການທົດລອງທາງດ້ານຄວາມຮູ້ສຶກ ແລະ ຈິນຕະນາການແບບ ຕັກກະສາດ.

໓) ລັດທິ ໄຮ້ຕັກປັນຍານິຍົມ ແມ່ນທິດສະດີ ປັດຊະຍາ ທີ່ຈຳກັດຄວາມອາດ-ສາມາດ ໃນດ້ານຄວາມຮັບຮູ້ຂອງສະຕິປັນຍາ ແລະ ຖືວ່າ ການສຳຜັດໂດຍ-ກົງ, ຄວາມຮູ້ສຶກ, ສັນຊາດຍານ ເປັນສິ່ງຕົ້ນຕໍ ຂອງຄວາມຮັບຮູ້.

໔) ລັດທິຄະນະສົງ ແມ່ນທິດທາງທີ່ພະຍາຍາມຢາກເພີ່ມທະວີ ອິດທິພົນ ຂອງສາສະໜາ ແລະ ວັດ ໃນທຸກໆຂົງເຂດຂອງຊີວິດສັງຄົມ.

ເວົ້າລວມຄົງຢູ່ໂດຍລຳພັງ ໂດຍບໍ່ຂຶ້ນກັບຈິດສຳນຶກ ແລະ ມານະຈິດແຕ່ ປະການໃດ. ການເຄື່ອນໄຫວຕົວຈິງ ຂອງຄົນ ໄດ້ພິສູດວ່າ ໂດຍອາໄສອະໄວຍະວະຄວາມຮູ້ສຶກ ແລະ ສະຕິປັນຍາຂອງຕົນ, ຄົນສາມາດຮັບຮູ້ຄວາມ ເປັນຈິງຮອບຕົວ. ຖ້າຫາກຄົນບໍ່ມີຄວາມສາມາດເຂົ້າໃຈຄວາມເປັນຈິງຢ່າງ ຖືກຕ້ອງແລ້ວ ແມ່ນວ່າເຂົາກໍ່ບໍ່ສາມາດຈະດຳເນີນການກະທຳໃດໆ ເພື່ອປ່ຽນ - ແປງ ແລະ ຫມູນໃຊ້ຄວາມເປັນຈິງດັ່ງກ່າວ ໃນຈຸດປະສົງຂອງຕົນເອງ.

ຈຸດພິເສດທີ່ສຳຄັນທີ່ສຸດຂອງປັດຊະຍາທຶນນິຍົມ ສະໄຫມໃຫມ່ນັ້ນ ແມ່ນລັກສະນະອະພິທຳຂອງມັນ ທີ່ປະຕິເສດຫລັກການສັດຈະວິພາກ ກ່ຽວກັບສາຍ ພົວພັນລວມທົ່ວໄປ ລະຫວ່າງບັນດາປະກົດການຂອງຄວາມເປັນຈິງ ແລະ ປະຕິເສດຫລັກການຂະຫຍາຍຕົວແບບສັດຈະວິພາກ. ການສະແດງຕົວແບບເດັ່ນ - ກວ່າຫມູ່ຂອງ ທັດສະນະອະພິທຳນັ້ນ ແມ່ນເຈດຕະສັນ (ເອັກເລັກຕິກ) ແລະ ໂຊຟິສ.

ເຈດຕະສັນ (ເອັກເລັກຕິກ) ແມ່ນການທ້ອນໂຮມທັດສະນະປັດຊະຍາ , ຄວາມເຫັນ, ຫລັກມູນທິດສະດີ, ການຕີລາຄາດ້ານການເມືອງ ແລະ ອື່ນໆທີ່ແຕກຕ່າງກັນທີ່ສຸດ ຊຶ່ງບາງຄັ້ງບາງຄາວ ກໍ່ຂັດແຍ່ງກັນນັ້ນ ເຂົ້າເປັນທິດສະດີອັນດຽວກັນ. ຄວາມຜິດພາດດ້ານກຳມະວິທີວິທະຍາພື້ນຖານຂອງເຈດຕະສັນ- ນັ້ນ ແມ່ນບໍ່ຮູ້ໄຈ້ແຍກສາຍພົວພັນທີ່ສຳຄັນຂອງສິ່ງວັດຖຸອອກຈາກຜົນລວມ ຂອງສາຍກ່ຽວພັນ ແລະ ການພົວພັນຂອງມູນຄວາມຈິງ. ແທນທີ່ຕ້ອງໄຈ້ແຍກ ອັນສຳຄັນ ແລະ ພື້ນຖານ ມັນສັງລວມດ້ານ ແລະ ລັກສະນະສະເພາະ ທີ່ແຕກຕ່າງກັນແບບກົນຈັກ.

ໂຊຟິສ ແມ່ນການບິດເບືອນຄວາມເປັນຈິງຂອງສິ່ງວັດຖຸ ໂດຍເຈດຕະນາ, ແມ່ນການຫລອກລວງ, ການກະທຳອັນມີເລ່ຫລ່ຽມທີ່ປົກປິດດ້ວຍ ຄວາມຖືກຕ້ອງແບບພົວເຜີນ. ບັນດານັກປັດຊະຍາ ນຳໃຊ້ວິທີໂຊຟິສ ນີ້ ໂດຍ ຫມູນໃຊ້ກົດເກນຂອງປະກົດການຈຳນວນຫນຶ່ງ ແທນທີ່ປະກົດການອື່ນໆ ຫມູນໃຊ້ ຂໍ້ສະຫລຸບກ່ຽວກັບເຫດການໃນໄລຍະປະຫວັດສາດຫນຶ່ງ ແທນທີ່ໄລຍະອື່ນ ໆ.

ປັດຊະຍາທຶນນິຍົມ ປະຈຸບັນນີ້ມີຫລາຍທ່າອຽງ,ມີສາຂານ້ອຍໃຫຍ່, ພ້ອມດ້ວຍ ຫລາຍສີສັນ, ຫລາຍຮູບຫລາຍແບບ ຂອງແຕ່ລະທ່າອຽງ ແລະ ແຕ່ລະສາຂາ. ເຂົາເວົ້າໂຍກວ່າ ລັກສະນະຫລາຍຮູບຫລາຍສີຂອງສາຂາຕ່າງໆ

ຂອງປັດຊະຍານາຍທຶນນັ້ນ ແມ່ນ "ຄວາມຈະເລີນກ້າວຫນ້າ" ຂອງປັດຊະຍາທຶນນິຍົມ. ໃນຕົວຈິງແລ້ວ ອັນນີ້ຫມາຍຄວາມວ່າ ປັດຊະຍາທຶນນິຍົມບໍ່ມີຄວາມສາມາດຈະສ້າງທັດສະນະແບບວິທະຍາສາດ ທີ່ແທ້ຈິງ ກ່ຽວກັບໂລກ ແລະຖານະຂອງຄົນໃນໂລກ.

ເວົ້າລວມແລ້ວ ປັດຊະຍາທຶນນິຍົມ ສະໄຫມໃຫມ່ ທັງຫມົດສິ່ງເສີມລັດທິຫຼຸຍທັດນິຍົມ ແລະ ຄວາມບໍ່ເຊື່ອຫມັ້ນໃນອະນາຄົດ, ວ່າຄົນຄົງຢູ່ຢ່າງບໍ່ມີຄວາມຫມາຍ ແລະ ຢ່າງໄຮ້ຄວາມສາມາດ, ສິ່ງເສີມລັດທິເອກະຊົນ. ມັນພະຍາຍາມຊັກຊວນຄົນບໍ່ໃຫ້ສົນໃຈບັນຫາປະຈຳວັນ ຂອງການຂະຫຍາຍຕົວ - ທາງສັງຄົມ ໃນສະໄຫມປະຈຸບັນນີ້ ຫາກໃຫ້ສົນໃຈໂລກໃນຕົວຂອງຄົນ, ໃຫ້ສົນໃຈບົວລະບັດຕົນເອງ, ສິ່ງເສີມໃຫ້ປະຕິເສດທັດສະນະດຳເນີນຊີວິດ ຢ່າງຕັ້ງຫນ້າ.

ບັນດາທິດທາງພື້ນຖານຂອງປັດຊະຍາທຶນນິຍົມສະໄຫມໃຫມ່ນັ້ນ ແມ່ນລັດທິໂຕມິດໃຫມ່, ລັດທິປະຕິຖານນິຍົມໃຫມ່ ແລະ ລັດທິຊົງຕົວນິຍົມ.

## ໔. ລັດທິໂຕມິດໃຫມ່

ລັດທິໂຕມິດໃຫມ່ ແມ່ນປັດຊະຍາຂອງ ໂຟມາ ອັກວິນສະກີ (໑໒໒໕ - ໑໒໗໔ ) ນັກປັດຊະຍາ-ນັກທິດສະດີ ສາສະຫນາໃນສະໄຫມບູຮານກາງ,ປັດຊະຍານີ້ໄດ້ຟື້ນຊີບຄືນໃຫມ່ ແລະ ໄດ້ປັບປຸງ ໃຫ້ສອດຄ່ອງກັບຜົນປະໂຫຍດ - ຂອງພວກນາຍທຶນ. ໃນພາສາລາຕິນ ຊື່ໂຟມາພັນສຽງອອກເປັນ ໂຕມາ.ທິດສະດີຂອງ ໂຟມາ ອັກວິນສະກີ ຈຶ່ງຖືກຮຽກເປັນ ລັດທິໂຕມິດ. ພາຍລູນມາໃນເງື່ອນໄຂທຶນນິຍົມ ລັດທິໂຕມິດ ຈຶ່ງມີຊື່ໃຫມ່ ຄືລັດທິ ເນໂອໂຕມິດ ຫມາຍຄວາມວ່າ ລັດທິໂຕມິດໃຫມ່. ທິດສະດີນີ້ ແມ່ນປັດຊະຍາ ທາງການຂອງສາສະຫນາ ກະໂຕລິກ. ບັນດາຕົວແທນທີ່ມີຊື່ສຽງກ່ວາຫມູ່ຂອງລັດທິ ໂຕມິດໃຫມ່ນັ້ນແມ່ນ: ຈ.ມາຣີແຕນ ແລະ ແອ. ຈິນຊົງ (ຝະລັ່ງ ), ອີ.ໂກມ-ແມສ (ສ.ສ.ຢ. ), ກ. ເວດແຕ ແລະ ລ.ກາບຣີແອນ ( ໂອຕຣິສ ), ມ. ອັດເລີ ( ອາເມລິກາ ), ອີ. ໂບແຮນສະກີ ແລະ ອື່ນໆ .

ເນື້ອໃນພື້ນຖານຂອງປັດຊະຍາ ໂຕມິດໃໝ່ນັ້ນ ແມ່ນການວາງພື້ນຖານ-ການຄົງຢູ່ ແລະ ການມີອຳນາດສູງ ໃນທຸກດ້ານຂອງພະເຈົ້າ. ບັນດານັກໂຕມິດໃໝ່ ອີງໃສ່ທິດສະດີອັກວິນສະກີ ແລະ ຖືວ່າ ພະເຈົ້າເປັນຕົ້ນກຳເນີດໃຫ້ແກ່ການເຄື່ອນໄຫວ. ພະເຈົ້າແມ່ນຕົ້ນເຫດທຳອິດທີ່ສາມາດ ໃຫ້ກຳເນີດ, ແມ່ນຕົ້ນເຫດອັນຈຳເປັນຂອງສິ່ງມີຊີວິດທັງໝົດ ແລະ ອື່ນໆ, ແມ່ນສິ່ງມີຊີວິດທີ່ປະເສີດສຸດ, ແມ່ນສິ່ງມີຊີວິດທີ່ມີສະຕິປັນຍາ ທີ່ກຳນົດເສັ້ນທາງສຳລັບທຸກສິ່ງທຸກຢ່າງທີ່ຄົງຢູ່ໃນທຳມະຊາດ.

ຄວາມຢັ້ງຢືນດັ່ງກ່າວ ຝືນກັບຫລັກມູນວິທະຍາສາດ. ດັ່ງທີ່ໄດ້ຊີ້ແຈງອອກມາໃນພາກ "ລັກສະນະເປັນວັດຖຸ ແລະ ຄວາມເປັນເອກະພາບຂອງໂລກ " ແລ້ວນັ້ນ, ໂລກຄົງຕົວຢູ່ໂດຍລຳພັງ. ມັນຄົງຢູ່ຢ່າງຕະຫລອດການໃນກາລະ-ເວລາ ແລະ ຢ່າງບໍ່ມີການສິ້ນສຸດໃນກາງຫາວ. ບໍ່ມີຜູ້ໃດເປັນຜູ້ສ້າງໂລກຂຶ້ນມາ. ກະໂຕການສຳນຶກກ່ຽວກັບພະເຈົ້ານັ້ນໄດ້ເກີດມີໃນໝູ່ຄົນ ໃນເມື່ອພວກເຂົາເຈົ້າໄດ້ເລີ່ມຕົ້ນຄົ້ນຄິດກ່ຽວກັບ ບັນດາປະກົດການໄພທຳມະຊາດ,ກ່ຽວກັບການເຈັບເປັນ ແລະ ຄວາມຕາຍຂອງຄົນ, ແຕ່ຫາກບໍ່ສາມາດຈະອະທິ - ບາຍປະກົດການດັ່ງກ່າວນີ້ໄດ້. ໃນສະໄໝນັ້ນ ຄົນຈຶ່ງເລີ່ມຕົ້ນອະທິບາຍ ວ່າ ອຳນາດຂອງທຳມະຊາດດັ່ງກ່າວນີ້ ເປັນຄືອຳນາດມະຫັດສະຈັນ (ຄື ອຳນາດພະເຈົ້າ ) ທີ່ຢູ່ເທິງຟ້າ. ວິທະຍາສາດສະໄໝໃໝ່ ແລະ ການທີ່ຄົນໄດ້ ພິຊິດອະວະກາດນັ້ນ ໄດ້ພິສູດຢ່າງໜັກແໜ້ນວ່າ ບໍ່ເຄີຍມີ ແລະ ບໍ່ມີ ອຳນາດມາຈາກພະເຈົ້າ ແຕ່ປະການໃດ. ມີພຽງແຕ່ໂລກທີ່ເປັນວັດຖຸ ທີ່ເຄື່ອນໄຫວຂະຫຍາຍຕົວໄປຕາມກົດເກນສະເພາະຂອງມັນເທົ່ານັ້ນ. ບັນດານັກລັດທິ ໂຕມິດໃໝ່ ປະຕິເສດຄວາມສາມາດຂອງກະໂຕວັດຖຸ ໃນການເປັນຕົ້ນເຫດຂອງການເຄື່ອນໄຫວ. ດັ່ງທີ່ປັດຊະຍາ ແລະ ວິທະຍາສາດທຳມະຊາດໄດ້ ພິສູດມາແລ້ວວ່າ ບໍ່ມີກຳລັງອື່ນໃດເປັນຜູ້ນຳເອົາການເຄື່ອນໄຫວມາສູ່ວັດຖຸ, ແຕ່ມັນຫາກແມ່ນລັກສະນະສະເພາະ ທີ່ສຳຄັນທີ່ສຸດ ຂອງວັດຖຸ. ຢືນຢູ່ໃນທັດສະ-ນະອະພິທຳແລ້ວເບິ່ງການພົວພັນກັນ ລະຫວ່າງເຫດ ແລະ ຜົນ, ລະຫວ່າງ - ຄວາມອາດເປັນໄປໄດ້ ແລະ ຄວາມເປັນຈິງ, ລະຫວ່າງຄວາມບັງເອີນແລະຄວາມຈຳເປັນແລ້ວ ບັນດານັກລັດທິໂຕມິດໃໝ່ ບໍ່ສາມາດຈະອະທິບາຍ ວ່າເປັນໄປໄດ້ທີ່ມີການພົວພັນກັນລະຫວ່າງສິ່ງດັ່ງກ່າວ ແລະ ມີການປະສານ ສົມ

ທົບ ຊຶ່ງກັນ ແລະ ກັນກັບກະໂຕ ຄວາມເປັນຈິງ, ແລະ ພວກເຂົາເຈົ້າ ໄດ້ອ່ອຍໜ້າໄປຂໍຄວາມຊ່ວຍເຫລືອຈາກພະເຈົ້າ.

ພວກລັດທິໂຕມິດໃໝ່ ບໍ່ປະຕິເສດການຄົງຢູ່ຂອງວັດຖຸ, ຂອງພຶດພັນແລະ ສັດສາວາສິ່ງ. ພວກເຂົາເຈົ້າເລີ່ມຈາກຫລັກການທີ່ສຳຄັນທີ່ສຸດຂອງຕົນຄື ລັກສະນະກວມລວມທົ່ວໄປຂອງໂລກ. ຫລັກການນີ້ຮັບຮູ້ການຄົງຢູ່ຂອງທຸກສິ່ງທຸກຢ່າງທີ່ຄົນເຫັນຢູ່ອ້ອມຂ້າງຕົນ ແຕ່ໃນເງື່ອນໄຂທີ່ວ່າ ພະເຈົ້າຢືນຢູ່ເໜືອແລະ "ຄຸ້ມຄອງ" ທຸກສິ່ງທຸກຢ່າງເຫລົ່ານີ້.

ພວກລັດທິໂຕມິດໃໝ່ ໄຈ້ແຍກການດຳລົງຄົງຕົວເປັນ ສອງປະເພດ.ອັນທີໜຶ່ງ ແມ່ນການດຳລົງຄົງຕົວແບບເດັດຖານ ແລະ ບໍ່ມີຜູ້ໃດເປັນ ຜູ້ສ້າງຂຶ້ນມາ ນັ້ນຄືພະເຈົ້າ, ອັນທີສອງ ແມ່ນການດຳລົງຄົງຕົວ ເຊິ່ງແມ່ນພະເຈົ້າ - ເປັນຜູ້ສ້າງຂຶ້ນມາ. ຫລັກການພະເຈົ້າສ້າງໂລກນັ້ນ ບໍ່ແມ່ນການສ້າງຈາກອັນໃດໜຶ່ງຂຶ້ນມາ, ແຕ່ຫາກແມ່ນການສ້າງຈາກບໍ່ມີຫຍັງ. ຈາກບ່ອນນີ້ຈຶ່ງເກີດມີຄວາມຂັດແຍ່ງທີ່ບໍ່ອາດປະນີປະນອມກັນໄດ້ ລະຫວ່າງລັດທິໂຕມິດໃໝ່ ກັບລັດທິວັດຖຸນິຍົມ. ຕາມທັດສະນະຂອງພວກລັດທິໂຕມິດໃໝ່ແລ້ວ, ພະເຈົ້າບໍ່ພຽງແຕ່ແມ່ນພື້ນຖານຂອງການດຳລົງຄົງຕົວເທົ່ານັ້ນ ແຕ່ຍັງແມ່ນທັງພື້ນຖານຄວາມເປັນເອກະພາບຂອງໂລກ. ດັ່ງນັ້ນ, ພວກເຂົາເຈົ້າຈຶ່ງຢັ້ງຢືນວ່າ ຄວາມ - ເປັນເອກະພາບຂອງໂລກ ແມ່ນຢູ່ໃນລັກສະນະມີວິນຍານຂອງມັນ. ທັດສະນະຂອງພວກລັດທິໂຕມິດໃໝ່ ແມ່ນລັດທິຈິດຕະນິຍົມພາວະວິໄສ ແລະ ຝືນກັບວິທະຍາສາດ ແລະ ພຶດຕິກຳຕົວຈິງ. ຄວາມເປັນເອກະພາບຂອງໂລກຢູ່ ບ່ອນລັກສະນະເປັນວັດຖຸຂອງມັນ, ມີພຽງແຕ່ໂລກທີ່ເປັນວັດຖຸ ແລະ ມີຄວາມເປັນເອກະພາບ ພຽງແຕ່ໂລກດຽວເທົ່ານັ້ນ. ບໍ່ມີໂລກອື່ນຄົງຢູ່ ນອກຈາກໂລກ ທີ່ພວກເຮົາຮັບຮູ້ ແລະ ແວດລ້ອມຕົວເຮົາຢູ່. ວິທະຍາສາດທຳມະຊາດສະໄໝໃໝ່ ໄດ້ພິສູດຢ່າງໜັກແໜ້ນແລ້ວວ່າ ໂລກວັດຖຸຄົງຢູ່ຢ່າງຕະຫລອດການ , ວ່າບໍ່ມີຜູ້ໃດໄດ້ສ້າງໂລກນີ້ຂຶ້ນເລີຍ. ທຸກໆຂະບວນວິວັດໃນໂລກນີ້ລ້ວນແຕ່ ດຳເນີນໄປຕາມກົດເກນພາວະວິໄສ, ເຊິ່ງເປັນລັກສະນະສະເພາະສຳລັບໂລກນີ້ເທົ່ານັ້ນ. ມັນບໍ່ໄດ້ຖືກນຳເອົາມາຈາກໃສເລີຍ. ຊີວິດ, ພືດພັນ ແລະສັດສາວາສິ່ງ ລ້ວນແຕ່ໄດ້ກຳເນີດຂຶ້ນມາຍ້ອນຜົນຂອງການວິວັດທັນປ່ຽນ ແລະ ການຂະຫຍາຍຕົວຂອງກະໂຕໂລກ ທີ່ເປັນວັດຖຸ, ກຳເນີດຂຶ້ນມາຍ້ອນຜົນຂອງ ຮູບ

ແບບການເຄື່ອນເຫນັງຂອງວັດຖຸທີ່ແຕກຕ່າງກັນ.

ໃນທັດສະນະກ່ຽວກັບຄວາມຮັບຮູ້ ບັນດານັກລັດທິໂຕມິດໃຫມ່ ແຍກຄວາມຮູ້ອອກເປັນສາມປະເພດ ທີ່ຖືວ່າເປັນໄລຍະຂອງຄວາມຮັບຮູ້: ຄື ຄວາມ ຮັບຮູ້ທາງອະໄວຍະວະຄວາມຮູ້ສຶກ ທີ່ນຳໄປເຖິງການສະສົມເຫດການຕົວຈິງ ໂດຍອາໄສບົດຮຽນ; ຄວາມຮັບຮູ້ແບບມີເຫດມີຜົນ, ຫມາຍຄວາມວ່າ ການ ເສີມຂະຫຍາຍບັນດາທັດສະນະປັດຊະຍາ ໃນຖານະເປັນສົມມຸດຕິຖານ; ຄວາມຮັບຮູ້ໃນທຳນອງດຽວກັນ ( ຄວາມຮັບຮູ້ແບບຄ້າຍຄືກັນກັບພະເຈົ້າ ) ເຊິ່ງບັນດານັກລັດທິໂຕມິດໃຫມ່ ຜູກພັນກັນກັບການເປີດເຜີຍຄວາມລັບຂອງພະເຈົ້າ.ພວກເຂົາເຈົ້າຖືວ່າ ການເປີດເຜີຍຄວາມລັບ ແມ່ນຫມາກຜົນຂອງຄວາມເຊື່ອຖື.ມີແຕ່ຜູ້ທີ່ເຊື່ອຖືເທົ່ານັ້ນ ຈຶ່ງສາມາດເຫັນແຈ້ງ. ຄົນຍິ່ງໃກ້ຊິດກັບພະເຈົ້າ ໃນຄວາມຄິດ ແລະ ຄວາມຮູ້ສຶກເທົ່າໃດ ພະເຈົ້າຍິ່ງຈະໄຂຄວາມລັບໃຫ້ຄົນຜູ້ນັ້ນຊາບຫລາຍເທົ່ານັ້ນ.

ທັດສະນະລັດທິໂຕມິດໃຫມ່ ກ່ຽວກັບສາມໄລຍະຂອງຄວາມຮັບຮູ້ນີ້ ໄດ້ ນຳເອົາມາຫມູນໃຊ້ໃນບັນຫາກ່ຽວກັບສັດຈະທຳເຊັ່ນດຽວກັນ. ໃນເມື່ອພິຈາລະນາເບິ່ງວິທະຍາສາດ, ປັດຊະຍາ ແລະ ຄວາມເຊື່ອຖື ເປັນຄືຮູບແບບ ຂອງສັດຈະທຳ ທີ່ເປັນເອກະພາບ ແລະ ມີພຽງອັນດຽວນັ້ນແລ້ວ ບັນດານັກລັດ ທິໂຕມິດໃຫມ່ ກົດຂວາງບໍ່ໃຫ້ບັນດານັກປາດ ເຂົ້າຫຍຸ້ງກ່ຽວ ໃນວຽກງານ ສາສະຫນາ. ການຄົ້ນພົບສິ່ງໃຫມ່ໂດຍນັກວິທະຍາສາດນັ້ນ ພວກໂຕມິດໃຫມ່ອະທິບາຍວ່າ ແມ່ນພະເຈົ້າເປັນຜູ້ເບື້ອງຫາງໃຫ້. ເນື່ອງດ້ວຍຄວາມຈຳກັດຂອງຕົນສະຕິປັນຍາຂອງຄົນຈຶ່ງບໍ່ສາມາດຈະບັນລຸສັດຈະທຳອັນທີ່ມີພຽງແຕ່ການ ເປີດເຜີຍຄວາມລັບຂອງພະເຈົ້າເທົ່ານັ້ນ ສາມາດບັນລຸໄດ້. ຈາກນັ້ນລັດທິ ໂຕມິດໃຫມ່ ປະກາດຫລັກການທີ່ວ່າ ຄວາມເຊື່ອຖືຢູ່ເຫນືອຄວາມຮູ້. ຄວາມຮູ້ທີ່ບັນລຸໄດ້ໂດຍຜ່ານເສັ້ນທາງທຳມະດານັ້ນ ຮຽກຮ້ອງຕ້ອງໃຫ້ມີການກວດກາຢ່າງ -ເປັນປະຈຳຈາກຄວາມເຊື່ອຖື, ເຊິ່ງມີຄວາມຮູ້ທີ່ໄດ້ຮັບຜ່ານເສັ້ນທາງແບບມະຫັດສະຈັນ.

ຫລັກສູດທາງການ ທີ່ສະແດງເຖິງທັດສະນະຂອງລັດທິໂຕມິດໃຫມ່ ກ່ຽວກັບການພົວພັນຊຶ່ງກັນ ແລະ ກັນລະຫວ່າງປັດຊະຍາ ແລະ ສາສະຫນານັ້ນ ໄດ້ປະກາດວ່າ: "ປັດຊະຍາແມ່ນຜູ້ຮັບໃຊ້ ສາສະຫນາ ". ບໍ່ມີສິ່ງໃດທີ່ ສາສະ

ໜາໄດ້ປະກາດເປັນອັນຈອມປອມແລ້ວນັ້ນ ຈະສາມາດເປັນສັດຈະທຳໃນ ປັດຊະຍາໄດ້. ຕາມຄວາມເວົ້າຂອງພວກນັບຖືສາສະໜາແລ້ວ ຄວາມພະຍາ - ຍາມຢາກແຍກປັດຊະຍາອອກຈາກສາສະໜາ ກຣິສ ນັ້ນແມ່ນ "ພຶດຕິກຳຕ້ານຫລັກທຳ ສາສະໜາ ". ທັດສະນະຂອງບັນດານັກລັດທິໂຕມິດໃໝ່ ກ່ຽວກັບການພົວພັນກັນລະຫວ່າງວິທະຍາສາດ, ປັດຊະຍາ ແລະ ສາສະໜາ ເປັນຄືດັ່ງນີ້ແລ້ວ.

ບັນດານັກລັດທິໂຕມິດໃໝ່ ຍຶດຖືທັດສະນະຈິດຕະນິຍົມ ກ່ຽວກັບບັນຫາ - ຄວາມຮັບຮູ້. ພວກເຂົາເຈົ້າບໍ່ຖືເອົາກະໂຕຄວາມເປັນຈິງ, ບໍ່ຖືເອົາໂລກ ທີ່ຄົງຢູ່ນອກຕົວພວກເຂົານັ້ນ ເປັນຈຸດເລີ່ມຕົ້ນໃນຄວາມຮັບຮູ້ແບບປັດຊະຍາ , ຫາກຖືເອົາສຳນຶກທີ່ພະເຈົ້າໄດ້ສ້າງຂຶ້ນ ໃນຈິດໃຈຂອງຄົນມາເປັນຈຸດເລີ່ມ . ເປົ້າໝາຍຂອງສະຕິປັນຍາ ບໍ່ແມ່ນເປົ້າໝາຍທີ່ເປັນວັດຖຸ, ຫາກແມ່ນ ທາດແທ້ແບບຈິດຕະນິຍົມ. ຖ້າບໍ່ມີການຊ່ວຍເຫລືອຂອງພະເຈົ້າ, ບໍ່ມີຄວາມເຊື່ອ ຖືສາສະໜາແລ້ວ ສະຕິປັນຍາ ກໍ່ບໍ່ສາມາດຈະເຂົ້າໃຈທຳມະຊາດ ແລະ ສັງຄົມໄດ້. ຈຸດນີ້ກໍ່ໄດ້ສະແດງເຖິງລັດທິຈິດຕະນິຍົມ ພາວະວິໄສ ຂອງພວກເຂົາ ແລະ ການປະຕິເສດ ຄວາມຮັບຮູ້ແບບວິທະຍາສາດຄື ການສ່ອງແສງເຖິງໂລກພາວະວິໄສໃນຈິດສຳນຶກ ຂອງຄົນເຊັ່ນດຽວກັນ. ຂໍ້ສະຫລຸບສຸດທ້າຍຂອງທິດສະດີລັດທິໂຕມິດໃໝ່ ກ່ຽວກັບຄວາມຮັບຮູ້ນັ້ນ ນຳໄປເຖິງການທວງໃຫ້ບັນດາຜູ້ເຊື່ອຖືສາສະໜາຕ້ອງເຄົາລົບຢ່າງຕາຍໃຈຕໍ່ລະບຽບການທີ່ມີຢູ່ແລ້ວ.

ພວກລັດທິໂຕມິດໃໝ່ ເອົາລັດທິຟ້າແຖມ ທີ່ຢືນຢັນວ່າ ກຳລັງທີ່ເລິກ ລັບເຊັ່ນ ອຳນາດມະຫັດສະຈັນ, ແລະ ພະເຈົ້າ ເປັນຜູ້ຕັດສິນການຂະຫຍາຍຕົວຂອງສັງຄົມມະນຸດນັ້ນ ມາຝືນກັບແນວຄິດນິຍັດນິຍົມແບບປະຫວັດສາດ (ລັກສະນະກຳນົດເຫດ ຜົນທາງປະຫວັດສາດ ).

ຄວາມເປັນຈິງ ໄດ້ພິສູດຄວາມຜິດພາດຂອງຫລັກມູນດັ່ງກ່າວ. ສັງຄົມມະນຸດຂະຫຍາຍຕົວຕາມກົດເກນພາວະວິໄສ, ໂດຍບໍ່ຂຶ້ນກັບກຳລັງມະຫັດສະຈັນ-ໃດໜຶ່ງ. ໃນຂະບວນວິວັດແຫ່ງການຂະຫຍາຍຕົວດັ່ງກ່າວ ລະບອບການ ສັງຄົມໜຶ່ງ ໄດ້ປ່ຽນແທນດ້ວຍລະບອບການສັງຄົມອື່ນໆ. ລະບອບສັງຄົມນິຍົມໄດ້ກ້າວຂຶ້ນມາປ່ຽນແທນລະບອບທຶນນິຍົມ.

ໃນຂໍ້ຂຽນຂອງເຂົາ ບັນດານັກລັດທິໂຕມິດໃໝ່ ໄດ້ຕຳໜິຕິຕຽນລະບຽບ

ການຕ່າງໆຂອງທຶນນິຍົມ. ຕາມຄວາມເຫັນຂອງພວກເຂົາແລ້ວ ການ ພົວພັນລະຫວ່າງນາຍທຶນ ກັບກຳມະກອນ ຕ້ອງໄດ້ກໍ່ສ້າງຂຶ້ນ ບົນພື້ນຖານແຫ່ງສິນທຳ, ບົນພື້ນຖານມະໂນທຳຂອງຜູ້ກົດຂີ່ຂູດຮີດ.

ການຕຳໜິວິຈານລັດທິທຶນນິຍົມໃນຮູບແບບດັ່ງນີ້ແມ່ນຮູບແບບການແກ້ ຕົວຢ່າງນິ້ມນວນ, ເພາະວ່າບໍ່ໄດ້ມີການຕັ້ງບັນຫາ ກ່ຽວກັບການລົບລ້າງ ກະໂຕພື້ນຖານຄືນຂູດຮີດຄົນ ຄືກຳມະສິດເອກະເທດ. ພວກລັດທິໂຕມິດໃໝ່ປະກາດວ່າ ຄົນທຸກຄົນລ້ວນແຕ່ເປັນອ້າຍນ້ອງນຳກັນ ແລະ ທຸກຄົນຕ້ອງຮັກກັນ, ສາມັກຄີກັນ, ໃນຕົວຈິງແລ້ວ ອັນນີ້ແມ່ນການອ້າງເອົາຊື່ຂອງພະເຈົ້າ ເພື່ອສ້າງສັນຕິພາບທາງຈິດໃຈຂຶ້ນ ລະຫວ່າງກຳມະກອນ ແລະ ນາຍທຶນ, ລະຫວ່າງຜູ້ຖືກກົດຂີ່ຂູດຮີດ ກັບຜູ້ກົດຂີ່ຂູດຮີດ. ດັ່ງນີ້ເອງ ທີ່ການປົກປ້ອງລັດທິທຶນນິຍົມໄດ້ດຳເນີນໄປພາຍໃຕ້ຄົນທຸງແຫ່ງການຕຳໜິວິຈານລັດທິທຶນນິຍົມ.

## ໓. ລັດທິປະຕິຖານນິຍົມໃໝ່ (ໂປຊິຕິວິດນິຍົມໃໝ່ )

ຊື່ຂອງທ່າອຽງປັດຊະຍານີ້ ອອກມາຈາກຄຳສັບ "ໂປຊິຕິບ", ທີ່ມີຄວາມໝາຍເປັນສິ່ງທີ່ດີ. ຖືກັນວ່າ ຜູ້ສ້າງຕັ້ງລັດທິ "ປະຕິຖານນິຍົມ" ນັ້ນແມ່ນນັກປັດຊະຍາຊາວຝະລັ່ງໂອກຸດ ກຸດກົນ ໑໗໙໘-໑໘໕໗ ). ບັນດານັກປັດຊະຍາຊາວອັງກິດ ຈອນ ສະຈວດ ມິນ(໑໘໐໖-໑໘໗໓) ແລະ ເຮີເບີດ ສະເປັນເຊີ ( ໑໘໒໐-໑໙໐໓ ) ກໍ່ອີງໃສ່ທັດສະນະປະຕິຖານນິຍົມໃນການຄົ້ນຄວ້າບັນຫາປັດຊະຍາເຊັ່ນດຽວກັນ. ທິດສະດີຂອງນັກປັດຊະຍາດັ່ງກ່າວ ແມ່ນ ຮູບແບບທຳອິດໃນການຂະຫຍາຍຕົວຂອງລັດທິປະຕິຖານນິຍົມ.

ຫລັກມູນພື້ນຖານຂອງລັດທິປະຕິຖານນິຍົມ ຢູ່ບ່ອນວ່າ ມັນຄືມີລະດັບ ສູງກວ່າລັດທິວັດຖຸນິຍົມ ແລະ ຈິດຕະນິຍົມ ແລະ ໄດ້ຕັ້ງປັດຊະຍາໃໝ່ທີ່ "ດີເລີດ" ກວ່າເກົ່າ ຄືລັດທິປະຕິຖານນິຍົມ. ໃນຕົວຈິງເມື່ອໄດ້ມີການ ໄຈ້ແຍກຢ່າງລະອຽດແລ້ວ ເຫັນໄດ້ວ່າ ລັດທິປະຕິຖານນິຍົມ ແມ່ນໜຶ່ງໃນບັນດາ ທ່າອຽງຂອງລັດທິຈິດຕະນິຍົມອັດຕະວິໄສ. ໃນການແກ້ໄຂບັນຫາພື້ນຖານຂອງປັດຊະຍາ ລັດທິປະຕິຖານນິຍົມ ໄດ້ເລີ່ມຈາກທັດສະນະທີ່ວ່າ ຄວາມຮູ້ສຶກແລະມະ

ໂນພາບ ກ່ຽວກັບໂລກນັ້ນ ມີມາກ່ອນ, ສ່ວນໂລກເອງນັ້ນ ແມ່ນສິ່ງເກີດລູນ, ແມ່ນຜະລິດຕະພັນຂອງຄວາມຮູ້ສຶກ ແລະ ມະໂນພາບ.

ຮູບແບບທີ່ສອງ ໃນການຂະຫຍາຍຕົວຂອງລັດທິປະຕິຖານນິຍົມນັ້ນ ແມ່ນທິດສະດີຂອງນັກປັດຊະຍາຊາວໂອຕຣິສ ແອກສະຕະ ມາຊ (໑໘໓໘–໑໙໑໖) ນັກປັດຊະຍາຊາວສະວິດ ຣີຄາດອາເວນາຣິອູສ ( ໑໘໔໓–໑໘໙໖ ) ແລະ ຜູ້ສືບທອດຂອງພວກເຂົາເຈົ້າ . ຮູບແບບນີ້ຖືກຮຽກເປັນ "ລັດທິມາຊ" (ຕາມຊື່ຂອງຜູ້ສ້າງຕັ້ງຄື ມາຊ ), ຫລື " ລັດທິ " ປົດຮຽນຕຳໜິວິພາກ . ບັນດານັກລັດທິມາຊ ຖືວ່າຄວາມຮູ້ສຶກຂອງຄົນເປັນພື້ນຖານຕົ້ນຕໍຂອງທຸກຢ່າງທີ່ຄົງຢູ່. ປຶ້ມນິພົນຂອງ ວ.ອີ.ເລນິນ "ລັດທິວັດຖຸນິຍົມ ແລະ ລັດທິປົດຮຽນຕຳໜິວິພາກ" ມີບົດບາດຕັດສິນຊີ້ຂາດໃນການເປີດແບທາດແທ້ຂອງລັດທິ ມາຊ ແລະ ໃນການພິສູດລັກສະນະໄຮ້ສາລະດ້ານວິທະຍາສາດຂອງມັນ.

ຮູບແບບທີ່ສາມ ຂອງລັດທິປະຕິຖານນິຍົມນັ້ນ ໄດ້ກຳເນີດຂຶ້ນໃນສະໄໝຕົ້ນຊຸມປີ ໒໐ ສະຕະວັດທີ ໒໐. ມັນຖືກຮຽກເປັນລັດທິປະຕິຖານນິຍົມໃໝ່ . ຜູ້ສ້າງຕັ້ງລັດທິດັ່ງກ່າວ ແມ່ນບັນດານັກປັດຊະຍາຊາວໂອຕຣິສ ໂມຣິສ ສະລິກ (໑໘໘໒–໑໙໓໖ ), ຣູໂດນ ການນັບ ( ໑໘໙໑–໑໙໗໐ ) ແລະ ອື່ນໆ ທີ່ໄດ້ເຕົ້າໂຮມກັນຢູ່ອ້ອມຂ້າງອັນທີ່ເອີ້ນວ່າ ໜ່ວຍວຽງວຽນ. ທັດສະນະ ຂອງນັກປັດຊະຍາຊາວອັງກິດ ເບັກຕຣານ ຣັດແຊນ( ໑໘໗໒–໑໙໗໐ ) ແລະນັກປັດ ຊະຍາຊາວໂອຕຣິສ ລູດະວິກ ວິດເກນສະເຕນ (໑໘໘໙–໑໙໕໑) ນັ້ນໄດ້ສົ່ງອິດທິພົນຫລວງຫລາຍຕໍ່ການສ້າງຕັ້ງລັດທິປະຕິຖານນິຍົມໃໝ່. ໃນປະຈຸບັນນີ້ ລັດທິປະຕິຖານນິຍົມໃໝ່ ໄດ້ຮັບການຂະຫຍາຍຕົວດ້ວຍຕົນເອງໃນອັນ ທີ່ຮຽກວ່າ "ລັດທິຕັກປັນຍານິຍົມຕຳໜິວິພາກ" ຂອງນັກ ປັດຊະຍາຊາວອັງກິດ ກ.ໂປເປີ.

ປັດຊະຍາລັດທິປະຕິຖານນິຍົມໃໝ່ ໄດ້ແຍກອອກເປັນລັດທິປະຕິຖານນິຍົມຕັກກະສາດ ແລະ ການວິໄຈທາງພາສາສາດ. ລັດທິປະຕິຖານນິຍົມ ຕັກກະສາດປະຕິເສດບົດບາດດ້ານການນະວິທີວິທະຍາຂອງປັດຊະຍາໃນຂະບວນ ວິວັດແຫ່ງຄວາມຮັບຮູ້. ພວກນັກປະຕິຖານນິຍົມໃໝ່ ທັງຫລາຍພາກັນປະກາດວ່າ: "ປັດຊະຍາ ບໍ່ແມ່ນວິທະຍາສາດ, ແຕ່ລະວິທະຍາສາດລ້ວນແຕ່ແມ່ນປັດຊະຍາໃນຕົນເອງ".ພວກເຂົາເລີ່ມຕົ້ນຈາກເລື່ອງທີ່ວ່າ ບັນຫາກ່ຽວກັບການພົວພັນກັນ

ລະຫວ່າງຈິດສຳນຶກ ແລະ ວັດຖຸນັ້ນ ບໍ່ມີຄວາມໝາຍ ແລະ ປັດຊະຍາບໍ່ຄວນຕັ້ງບັນຫານີ້ເປັນເປົ້າໝາຍແຫ່ງການວິໄຈຂອງຕົນ. ໃນເມື່ອປະກາດຫລັກ - ການລັດທິເອກະທາດນິຍົມແບບເປັນກາງ ພວກເຂົາເຈົ້າຖືວ່າໂລກມີລັກສະນະຈິດໃຈໜ້ອຍກວ່າທີ່ບັນດານັກຈິດຕະນິຍົມຄິດໄວ້.

ໜຶ່ງໃນຈຳນວນຫລັກການປັດຊະຍາທີ່ສຳຄັນທີ່ສຸດນັ້ນ ບັນດານັກປະຕິຖານນິຍົມຕັກກະສາດ ພາກັນຖືວ່າແມ່ນຫລັກການລັດທິວັດຖຸວິທະຍາ. ຈາກ ຫລັກການນີ້ພວກເຂົາເຈົ້າໄດ້ວາງພື້ນຖານກ່ຽວກັບຄວາມຈຳເປັນຕ້ອງຫັນປ່ຽນ ພາສາວິທະຍາສາດ ມາເປັນຕຳລາວັດຖຸວິທະຍາ. ເຊັ່ນຕົວຢ່າງ ເຄື່ອງ ໝາຍ "S" ໃນວັດຖຸວິທະຍາໝາຍເຖິງເສັ້ນທາງ, "V" ໝາຍເຖິງຄວາມໄວ, "1" ໝາຍເຖິງຄວາມຍາວ ແລະ ອື່ນໆ. ທຸກຄົນທີ່ຊິນເຄີຍກັບວິທະຍາສາດລ້ວນແຕ່ເຂົ້າໃຈເຄື່ອງໝາຍດັ່ງກ່າວ ໃນທຳນອງດຽວກັນ. ສ່ວນຄວາມຮັບຮູ້ໃນວິທະຍາສາດອື່ນໆ ຕົວຢ່າງເຊັ່ນ: "ກົດເກນ", "ຖືກຕ້ອງຕາມ ກົດເກນ" ແລະ ອື່ນໆນັ້ນ ບໍ່ສາມາດເຂົ້າໃຈໃນທຳນອງດຽວກັນນີ້. ເພື່ອໃຫ້ບັນດານັກວິທະຍາສາດເຂົ້າໃຈກັນໄດ້ດີກວ່າ ຕ້ອງຈັດເຂົ້າເປັນລະບຽບ ແລະຈັດເອົາຄວາມຮູ້, ຕົວຢ່າງເຊັ່ນ "ສາຍເຫດ", "ຜົນ", "ຄວາມເປັນໄປໄດ້", "ຄວາມເປັນຈິງ" ນັ້ນໃຫ້ເຂົ້າໃນລະບົບເຄື່ອງໝາຍ ແລະ ຫລັກສູດ. ແຕ່ເຖິງແມ່ນວ່າຈະສາມາດຈັດທຸກໆຄວາມຮູ້ວິທະຍາສາດເຂົ້າເປັນລະບຽບກໍຕາມ, ຄວາມໝາຍຂອງຄວາມຮູ້ເຊັ່ນ "ສັງຄົມນິຍົມ", "ທຶນນິຍົມ", "ຊົນຊັ້ນ" , "ການປະຕິວັດ" ຈະບໍ່ມີຄວາມໝາຍແບບດຽວກັນສຳລັບນັກແນວຄິດຊົນຊັ້ນກຳມາຊີບ ແລະ ນັກແນວຄິດນາຍທຶນ.

ເບິ່ງໃນທັດສະນະວິທຍາສາດແທ້ຈິງແລ້ວ ຫລັກການພິສູດ ດ້ວຍການສຳຜັດ ເຊິ່ງນັກລັດທິປະຕິຖານນິຍົມໃໝ່ ເປັນຜູ້ຍົກຂຶ້ນມາ ແລະ ໄດ້ປະກາດ-ວ່າ ລັກສະນະສັດຈະທຳຂອງແຕ່ລະຄວາມຢັ້ງຢືນນັ້ນ ຕ້ອງໄດ້ຮັບການກວດກາດ້ວຍອະໄວຍະວະຄວາມຮູ້ສຶກຂອງຄົນນັ້ນ ແມ່ນຫລັກການທີ່ໄຮ້ສາລະ. ສິ່ງໃດທີ່ບໍ່ສາມາດຈະກວດກາດ້ວຍຄວາມຮູ້ສຶກໄດ້ນັ້ນ ຖືວ່າເປັນສິ່ງຈອມປອມແລະໄຮ້ຄວາມໝາຍ. ດັ່ງນີ້ ຕາມຄວາມເຫັນຂອງພວກນັກລັດທິປະຕິຖານນິຍົມ ໃໝ່ແລ້ວ, ສົມມຸດຕິຖານຈະເປັນສັດຈະທຳ ຖ້າຫາກມັນໄດ້ຮັບຄວາມຢັ້ງຢືນ ດ້ວຍການພິສູດຕົວຈິງ; ສົມມຸດຕິຖານຈະເປັນສິ່ງຈອມປອມ ຖ້າຫາກມັນຖືກປະຕິ -

ເສດດ້ວຍການພິສູດຕົວຈິງ. ເຊັ່ນຕົວຢ່າງ ຖ້າຫາກພວກເຮົາເວົ້າວ່າ: "ຝົນຕົກ" ແມ່ນວ່າແຕ່ລະຄົນສາມາດໄດ້ຮັບຄວາມແນ່ໃຈໄດ້ໂດຍຜ່ານອະໄວຍະວະຄວາມຮູ້ສຶກຂອງຕົນ ເຊັ່ນຈັກຂຸວິນຍາ, ໂສຕະວິນຍານ, ກາຍະວິນຍານແລະອັນນີ້ແມ່ນສັດຈະທຳ. ຖ້າຫາກພວກເຮົາເວົ້າວ່າ: "ວັດຖຸມີມາກ່ອນ ສ່ວນຈິດສຳນຶກມີມາລຸນຫລັງ" ແລ້ວ, ແມ່ນວ່າຈະກວດກາສົມມຸດຕິຖານນີ້ດ້ວຍ ອະໄວຍະວະຄວາມຮູ້ສຶກນັ້ນບໍ່ໄດ້ ແລະ ຕາມຄວາມເຫັນຂອງບັນດານັກລັດທິປະຕິ - ຖານນິຍົມໃໝ່ແລ້ວ ສາມາດສະຫລຸບຄວາມໄດ້ວ່າ ມັນບໍ່ແມ່ນສັດຈະທຳ ແລະບໍ່ມີຄວາມໝາຍແຕ່ປະການໃດ. ບົນພື້ນຖານນີ້ ບັນດານັກລັດທິປະຕິຖານນິຍົມໃໝ່ ໄດ້ຕັດບັນຫາພື້ນຖານຂອງປັດຊະຍາອອກຈາກການຄົ້ນຄວ້າຂອງຕົນ. ຖ້າຫາກເອົາຕາມຫລັກການພິສູດດ້ວຍການສຳຜັດແລ້ວ ແມ່ນວ່າທຸກໆຄວາມ ຮູ້ຂອງໂລກມະນຸດກ່ຽວກັບເຫດການໃນອະດີດນັ້ນ ລ້ວນແຕ່ແມ່ນເລື່ອງຈອມປອມທັງໝົດ ເພາະວ່າບໍ່ມີໃຜຈະສາມາດກວດກາເຫດການດັ່ງກ່າວນີ້ ດ້ວຍອະໄວຍະວະຄວາມຮູ້ສຶກຂອງຕົນ. ທຸກໆການຄາດຄະເນທາງວິທະຍາສາດ ກໍ່ຈະ - ແມ່ນເລື່ອງຈອມປອມທັງນັ້ນ ເພາະວ່າໃນນີ້ບໍ່ມີຄວາມສາມາດຈະກວດກາ - ດ້ວຍຄວາມຮູ້ສຶກໄດ້.

ໜຶ່ງໃນຈຳນວນຫລັກການຂອງລັດທິປະຕິຖານນິຍົມ ຕັກກະສາດນັ້ນ ແມ່ນຫລັກການ ກົງວັງຊີວົງ 1) (ຫລັກການແບບຕົກລົງນຳກັນ)ຊຶ່ງຖືວ່າຄວາມ ຮູ້ແລະ ທິດສະດີວິທະຍາສາດ ແມ່ນໝາກຜົນຂອງການຕົກລົງກັນ ລະຫວ່າງບັນດານັກປາດ. ການຕົກລົງກັນ ລະຫວ່າງນັກວິທະຍາສາດດັ່ງນີ້ ແມ່ນຄວາມແນ່ນອນຂອງທິດສະດີນີ້ ຫລືທິດສະດີນັ້ນ. ທັດສະນະກ່ຽວກັບຄຳນິຍາມຄວາມ ຖືກຕ້ອງຂອງທິດສະດີດັ່ງກ່າວນີ້ ແມ່ນເປັນໜຶ່ງໃນຈຳນວນຫລັກມູນຂອງຜູ້ສືບທອດປັດຊະຍາລັດທິມາຊ ກ່ຽວກັບລັກສະນະສຳຄັນລວມ. ພວກເຂົາເຈົ້າເວົ້າ ວ່າສິ່ງທີ່ພາວະວິໄສນັ້ນ ແມ່ນສິ່ງທີ່ມີລັກສະນະກວມລວມ. ໃນປຶ້ມນິພົນເລື່ອງ "ລັດທິວັດຖຸນິຍົມ ແລະ ລັດທິປົດຣຽນຕຳໜິວິພາກ" ວ.ອີ.ເລນິນ ໄດ້ເຜີຍແຜ - ຄວາມໄຮ້ສາລະທາງວິທະຍາສາດຂອງທິດສະດີ ກ່ຽວກັບລັກສະນະກວມ ລວມໃນຖານະເປັນມາດຖານຂອງສັດຈະທຳພາວະວິໄສ. ທ່ານໄດ້ຊີ້ແຈງວ່າ ໃນ

---

1) ກົງວັງຊີວົງແມ່ນສັນຍາຫລື ການຕົກລົງກັນ.

ສະໄຫມນັ້ນ ທິດສະດີສາສະໜາ ມີລັກສະນະກວມລວມຫລາຍກວ່າທິດສະດີປະຫວັດສາດ ເນື່ອງຈາກວ່າສ່ວນຫລວງຫລາຍຂອງມວນມະນຸດ ໄດ້ເຊື່ອຖື ພະເຈົ້າ. ແຕ່ຈາກບ່ອນນີ້ ຄວາມຢັ້ງຢືນຂອງວິທະຍາສາດກ່ຽວກັບເລື່ອງທີ່ວ່າ ບໍ່ມີພະເຈົ້ານັ້ນ ເປັນສັດຈະທຳແບບພາວະວິໄສຢູ່ຕໍ່ໄປ.

ລັດທິວັດຖຸນິຍົມສັດຈະວິພາກ ໄດ້ຊີ້ແຈງເສັ້ນທາງທີ່ຖືກຕ້ອງພຽງ ເສັ້ນ-ດຽວ ທີ່ຈະນຳໄປສູ່ການແກ້ໄຂບັນຫາກ່ຽວກັບການກວດກາວ່າ ຄວາມຮູ້ ຂອງພວກເຮົາຖືກຕ້ອງຫລືບໍ່ ແລະ ການພິສູດວ່າ ຄວາມຮູ້ດັ່ງກ່າວນີ້ຖືກຕ້ອງແລ້ວ. ມີແຕ່ອັນທີ່ສອດຄ່ອງກັບຄວາມເປັນຈິງ, ສິ່ງທີ່ສ່ອງແສງຢ່າງຖືກຕ້ອງ ກະໂຕຄວາມເປັນຈິງໃນຈິດສຳນຶກຂອງພວກເຮົາເທົ່ານັ້ນ ຈຶ່ງແມ່ນສັດຈະທຳ. ມີແຕ່ພຶດຕິກຳຕົວຈິງເທົ່ານັ້ນ ສາມາດຊີ້ແຈງໃຫ້ເຫັນວ່າ ການສ່ອງແສງ ດັ່ງກ່າວນີ້ດຳເນີນໄປຢ່າງຖືກຕ້ອງຫລືບໍ່ຖືກຕ້ອງ, ຂໍ້ສະຫລຸບ ແລະ ຫລັກມູນຂອງ ພວກເຮົາ ກ່ຽວກັບຄວາມເປັນຈິງຮອບຕົວນັ້ນ ແມ່ນສັດຈະທຳ ຫລືບໍ່ແມ່ນສັດຈະທຳ.

ປັດຊະຍາການວິໄຈທາງພາສາສາດ * ( ປັດຊະຍາແບບພາສາສາດ ) ກໍຄືກັນກັບລັດທິປະຕິຖານນິຍົມຕັກກະສາດ ປະຕິເສດວ່າ ປັດຊະຍາ ບໍ່ມີໂລກະທັດ. ປັດຊະຍາການວິໄຈທາງພາສາສາດປະກາດວ່າ ທຸກໆບັນຫາປັດຊະຍາ-ລ້ວນແຕ່ບໍ່ມີລັກສະນະປະຫວັດສາດ. ຕາມຄວາມເຫັນຂອງບັນດາຜູ້ຄົ້ນທີ່ ຍຶດຖືທິດສະດີດັ່ງກ່າວນີ້ແລ້ວ ການວິໄຈທາງພາສາສາດຕ້ອງຊີ້ແຈງໃຫ້ເຫັນເຖິງລັກສະນະປອມແປງຂອງບັນຫາປັດຊະຍາ ແລະ ຊອກໃຫ້ເຫັນຕົ້ນກຳເນີດຂອງມັນໃນຄວາມຜິດພາດເພື່ອຫມູນໃຊ້ພາສາ. ບັນດາຜູ້ຕາງຫນ້າຂອງການວິໄຈທາງພາສາຖືວ່າ ທຸກໆຄຳສັບທີ່ພົວພັນກັບບັນຫາປັດຊະຍາ, ເຊັ່ນ "ວັດຖຸ", "ຈິດສຳນຶກ", "ໂລກພາວະວິໄສ" ນັ້ນຕ້ອງຕັດອອກຈາກການວິໄຈແບບວິທະຍາ-ສາດ, ປັດຊະຍາຕ້ອງຄົ້ນຄວ້າພຽງແຕ່ພາສາທຳມະດາສາມັນເທົ່ານັ້ນ. ເນື່ອງຈາກວ່າ ພວກເຂົາເຈົ້າປະຕິເສດ ການຄົ້ນຄວ້າບັນດາບັນຫາກ່ຽວກັບກຳ-ມະວິທີ ວິທະຍາ, ບໍ່ໄຈ້ແຍກບັນຫາກ່ຽວກັບການພົວພັນລະຫວ່າງພາສາ ແລະ ຈິດສຳນຶກ, ສາຍພົວພັນລະຫວ່າງພາສາກັບບັນດາຂະບວນວິວັດແຫ່ງການເຄື່ອນ

*) ພາສາສາດແມ່ນຄວາມຮູ້ກ່ຽວກັບພາສາ, ວິທະຍາສາດກ່ຽວກັບພາສາ.

ໄຫວຮັບຮູ້ແລ້ວ ທິດສະດີຂອງພວກເຂົາເຈົ້າຈຶ່ງພຽງແຕ່ໄດ້ອະທິບາຍການໝູນໃຊ້ປະໂຫຍກຕ່າງໆໃນພາສາຕາມແບບລັດທິບຶດຮຽນເທົ່ານັ້ນ. ພວກເຂົາບໍ່ຕັ້ງບັນຫາກ່ຽວກັບວ່າພາສາແມ່ນຫຍັງ, ມັນພົວພັນກັບບັນດາປະກົດການຂອງຄວາມເປັນຈິງທີ່ໄດ້ສ່ອງແສງອອກໂດຍຜ່ານຄຳສັບຕ່າງໆນັ້ນແນວໃດ.ຍິ່ງກວ່ານັ້ນ ພວກເຂົາເຈົ້າຖືວ່າ ກະໂຕສິ່ງວັດຖຸນັ້ນ ແມ່ນ "ເງົາຂອງຄຳສັບ". ສິ່ງວັດຖຸຄົງຢູ່ຖືວ່າແມ່ນຫລັງຈາກທີ່ຄົນໄດ້ຄົ້ນຄິດຕັ້ງຊື່ໃຫ້ສິ່ງວັດຖຸດັ່ງກ່າວນີ້ແລ້ວ . ຄວາມຮັບຮູ້ບໍ່ແມ່ນຮັບຮູ້ສິ່ງວັດຖຸທີ່ຄົງຢູ່ຢ່າງພາວະວິໄສ ຫາກແມ່ນຮັບຮູ້ຊື່ຂອງສິ່ງວັດຖຸດັ່ງກ່າວ ໝາຍຄວາມວ່າດ້ວຍຄຳສັບ, ດ້ວຍພາສາ. ພວກເຂົາ ບໍ່ຖືວ່າ ພາສາແມ່ນພາຫະນະເພື່ອສ່ອງແສງໂລກ, ແຕ່ຫາກແມ່ນພາຫະນະກໍ່ສ້າງແບບໄວຍາກອນ ດ້ວຍເຫດນີ້ເອງ ພວກເຂົາເຈົ້າຫລີກຈາກບັນຫາອັນ ເປັນຕາຍກ່ຽວກັບການດຳລົງຄົງຕົວ ແລະ ຈິດສຳນຶກຂອງຄົນ.

ພວກເຂົາເຈົ້າອະທິບາຍຄວາມຂັດແຍ່ງທີ່ຄົງຢູ່ໃນສັງຄົມນັ້ນວ່າ ຍ້ອນ ມີຄວາມຂັດແຍ່ງໃນດ້ານພາສາ. ພວກເຂົາເຈົ້າເວົ້າວ່າ ສຳລັບຜູ້ຄົນທີ່ ແຕກຕ່າງກັນນັ້ນ ຄຳສັບຄຳດຽວກັນ ມີຄວາມໝາຍທີ່ແຕກຕ່າງກັນ ດ້ວຍເຫດ ນັ້ນຄົນຈຶ່ງບໍ່ເຂົ້າໃຈກັນ. ຄວາມພະຍາຍາມຢາກນຳເອົາຄວາມຂັດແຍ່ງຕົວຈິງໄປສູ່ຄວາມຂັດແຍ່ງດ້ານພາສາ, ປ່ຽນການປະທະກັນໃນຕົວຈິງດ້ວຍການໂຕ້ຖຽງກັນດ້ານ ພາສາຄວາມເວົ້ານັ້ນ ບໍ່ພົ້ນຖານໃດໆໝົດ. ຄວາມພະຍາຍາມດັ່ງກ່າວນີ້ ເປັນສິ່ງອຳນວຍຄວາມສະດວກໃຫ້ພຽງແຕ່ພວກນາຍທຶນປະຕິການ ທີ່ຄອງອຳນາດເທົ່ານັ້ນ, ແຕ່ບໍ່ແມ່ນໃຫ້ແກ່ຊາວຜູ້ອອກແຮງງານ. ປັດຊະຍາການວິໄຈທາງພາສາສາດ ແລະລັດທິປະຕິຖານນິຍົມເວົ້າລວມ ອຳນວຍຄວາມສະດວກໃຫ້ແກ່ການດຶງດູດຈິດສຳນຶກຂອງຄົນອອກຈາກການແກ້ໄຂໜ້າທີ່ຕົວຈິງນັ້ນໄປສູ່ເສັ້ນທາງ ການໂຕ້ຖຽງກັນດ້ານພາສາຄວາມເວົ້າ. ດັ່ງນີ້ ໂດຍບໍ່ຍອມຮັບເລື່ອງທີ່ວ່າ ບັນດາຜູ້ທີ່ຍຶດຖືປັດຊະຍານີ້ ຈະມີເຈດຫລືບໍ່ ກໍຕາມ , ແຕ່ປັດຊະຍາແບບນີ້ບໍ່ອຳນວຍຜົນໃຫ້ແກ່ບັນດາກຳລັງທີ່ກ້າວໜ້າ, ແຕ່ ຫາກຊ່ວຍບັນດາກຳລັງປະຕິການໃນສັງຄົມ.

## ໕. ລັດທິຊົງຕົວນິຍົມ

ລັດທິ ຊົງຕົວນິຍົມ ຫລືປັດຊະຍາກ່ຽວກັບການຄົງຢູ່ ( ຊື່ນີ້ມາ ຈາກຄຳສັບພາສາລາຕິນ "ເອັກຊິສແຕນຊີອາ" ໝາຍຄວາມວ່າ ການຄົງຢູ່) ໄດ້ກຳເນີດຂຶ້ນມາກ່ອນສົງຄາມໂລກຄັ້ງທີໜຶ່ງ. ໃນເບື້ອງຕົ້ນມັນໄດ້ຮັບການ ແຜ່ຂະຫຍາຍຢ່າງກວ້າງຂວາງຢູ່ເຢຍລະມັນ ແລະ ຝະລັ່ງ ແລະ ຫລັງຈາກ ສົງຄາມໂລກຄັ້ງທີສອງແລ້ວ ມັນໄດ້ຮັບການແຜ່ຂະຫຍາຍໄປ່ສູ່ຫລາຍປະເທດ ໃນໂລກ ໃນນັ້ນລວມທັງບັນດາປະເທດໃນທະວີບອາຊີ, ອາຟຣິກກາ ແລະ ອາເມລິກາ.

ພື້ນຖານດ້ານທິດສະດີຂອງປັດຊະຍານີ້ ແມ່ນທັດສະນະປັດຊະຍາຂອງ ນັກປັດຊະຍາຊາວຝະລັ່ງ ອາ.ແບັກຊົງ ( ໑໘໕໙-໑໙໔໑), ຊາວດານມາກ ຊ.ແກເກໂກນ ( ໑໘໑໓-໑໘໕໕ ), ນັກປັດຊະຍາຊາວເຢຍລະມັນແອ.ຮູແຊນ ( ໑໘໕໙-໑໙໓໘ ) ແລະ ວ.ດິນເຕ ( ໑໘໓໓-໑໙໑໑ ). ທິດສະດີຂອງນັກປັດຊະຍາເຫລົ່ານີ້ໄດ້ເສີມຂະຫຍາຍລັດທິຈິດຕະນິຍົມອັດຕະວິໄສ ທີ່ໄດ້ ສະແດງຕົວອອກໃນລັດທິເທວະລະທັດ ແລະ ລັດທິໄຮ້ຕັກປັນຍານິຍົມ.

ບັນດາຕົວແທນຕົ້ນຕໍຂອງລັດທິຊົງຕົວນິຍົມນີ້ ແມ່ນ ມ.ໄຮເດັກແກ(໑໘໘໙-໑໙໗໖), ແລະ ກ.ຢາສແປ ( ໑໘໘໓-໑໙໖໙ ) ຢູ່ເຢຍລະມັນ,ຊັງໂປນຊາກ ( ໑໙໐໕-໑໙໘໐ ), ອາ.ການູ ( ໑໙໑໓-໑໙໖໐ ) ແລະ ກ . ມາກແຊນ ( ໑໘໘໙-໑໙໗໓ ) ຢູ່ຝະລັ່ງ.

ລັກສະນະຈົນຕາແຈຂອງໂລກະທັດແບບນາຍທຶນໄດ້ສະແດງອອກໃນປັດຊະຍາຊົງຕົວນິຍົມ. ໃນນັ້ນໄດ້ສ່ອງແສງເຖິງການຄັດຄ້ານແບບຕາມມີ ຕາມເກີດຂອງບາງຊັ້ນຄົນນາຍທຶນນ້ອຍ ແລະ ປັນຍາຊົນຕ້ານອຳນາດຮອບດ້ານ - ແລະ ການປົກຄອງຂອງນາຍທຶນຜູກຂາດໃນດ້ານເສດຖະກິດ, ການເມືອງ - ແລະ ຊີວິດດ້ານຈິດໃຈຂອງສັງຄົມນາຍທຶນ. ແຕ່ການຄັດຄ້ານດັ່ງກ່າວ ບໍ່ໄດ້ສະແດງອອກໃນຄວາມຮຽກຮ້ອງໃຫ້ໂຄ່ນລົ້ມອຳນາດການປົກຄອງຂອງນາຍທຶນຜູກຂາດ ແລະ ດັບສູນລັດທິທຶນນິຍົມຄືລະບອບສັງຄົມ ທີ່ໄດ້ພົ້ນສະໄໝໄປແລ້ວ. ມັນໄດ້ສະແດງອອກໃນການໂຄສະນາໃຫ້ປະຕິເສດການຕໍ່ສູ້ທຸກຮູບການ, ໃຫ້ເອົາຕົວອອກຈາກການດຳເນີນຊີວິດຢ່າງຕັ້ງໜ້າໄປສູ່ໂລກພາຍໃນຂອງ ຕົນ

ຂອງ. ລັດທິຊົງຕົວນິຍົມ ບໍ່ໄດ້ຊີ້ທາງຕົວຈິງເພື່ອລົບລ້າງຄວາມບໍ່ເປັນທຳດ້ານສັງຄົມ. ພວກນາຍທຶນປະຕິການໜູນໃຊ້ປັດຊະຍານີ້ເປັນອາວຸດເພື່ອຕໍ່ສູ້ ຕ້ານກັບແນວຄິດປະຕິວັດຂອງຊົນຊັ້ນກຳມະກອນ.

ໃຈກາງຄວາມສົນໃຈຂອງປັດຊະຍານີ້ ແມ່ນເອກະບຸກຄົນ. ບັນດານັກລັດທິຊົງຕົວນິຍົມ ຖືວ່າການດຳລົງຄົງຕົວ ແລະ ໂລກເປັນຄືກະແສແຫ່ງຈິດໃຈ, ອາລົມ, ຄວາມຮູ້ສຶກ ແລະ ແນວຄິດຂອງບຸກຄົນ. ພວກເຂົາເຈົ້າປະຕິເສດ ບັນຫາພື້ນຖານຂອງປັດຊະຍາ, ຄືບັນຫາກ່ຽວກັບການພົວພັນຂອງຈິດສຳນຶກ ກັບການດຳລົງຄົງຕົວ. ອາ.ກາມູ ຖືວ່າບັນຫາກ່ຽວກັບວ່າ ສົມຄວນຈະມີຊີວິດຢູ່ຫຼືບໍ່ນັ້ນ ເປັນບັນຫາພື້ນຖານຂອງປັດຊະຍາ. ຢາສແປ ໄດ້ຕັ້ງບັນຫານີ້ເປັນຄືບັນຫາກ່ຽວກັບຄວາມຕາຍ. ເຂົາເຫັນວ່າ ຄວາມໝາຍທັງໝົດ ຂອງຊີວິດແມ່ນຢູ່ບ່ອນວ່າ ຄົນເຮົາກຽມຕົວເພື່ອຄວາມຕາຍ. ເຂົາໄດ້ຂຽນວ່າ ການດຳລົງຊີວິດຢູ່ນັ້ນ ແມ່ນການຕາຍຢ່າງຊ້າໆ. ຕາມຄວາມເຫັນຂອງບັນດານັກລັດທິຊົງ-ຕົວນິຍົມແລ້ວ ໂລກນີ້ແມ່ນໂລກແຫ່ງຄວາມຢ້ານກົວ ແລະ ຄວາມໝົດຫວັງ . ກະໂຕຄົນນັ້ນເອງເປັນຜູ້ກໍ່ສ້າງໂລກທີ່ຮອບຕົວຄົນ. ການຄົງຢູ່ແມ່ນໂລກໃນຕົວຂອງຄົນ ແມ່ນຄວາມຮູ້ສຶກ, ແນວຄິດ, ຈິດໃຈ ແລະ ອາລົມ, ແມ່ນກະທັ້ງຮອດຈິດໃຕ້ສຳນຶກ (ອຸບະສະຕິ) ແລະ ສຳຜັດຖານໂດຍກົງ. ໂລກນີ້ບໍ່ ແມ່ນຜົນກຳເນີດຂອງເງື່ອນໄຂ ແລະ ສະພາວະການຂອງຊີວິດທີ່ຢູ່ຮອບຕົວຄົນ, ກົງກັນຂ້າມ ໂລກພາຍນອກແມ່ນຜະລິດຕະພັນຈາກໂລກພາຍໃນຂອງຄົນ. ນັກລັດທິຊົງຕົວນິຍົມ ປະຕິເສດເລື່ອງທີ່ວ່າ ເງື່ອນໄຂ ແລະ ສະພາວະການ ພາຍນອກເປັນສິ່ງກຳນົດຈິດສຳນຶກຂອງຄົນ. ຄົນເປັນຜູ້ປະດິດສ້າງໂລກໃຫ້ເປັນໄປຕາມແບບທີ່ຕົນຢາກເຫັນມັນ, ໂດຍເລີ່ມຈາກອາລົມຈິດຂອງຕົນ. ກະໂຕ ຄົນເອງ ກໍ່ບໍ່ແມ່ນຜະລິດຕະພັນຂອງສັງຄົມ, ຄົນເປັນຜູ້ສ້າງຕົນເອງຂຶ້ນມາ ຕາມຄວາມມັກຂອງຕົນ. ດັ່ງນີ້ ບັນດານັກລັດທິຊົງຕົວນິຍົມ ແກ້ໄຂບັນຫາພື້ນ ຖານຂອງປັດຊະຍາໂດຍຢືນຢູ່ໃນທັດສະນະຂອງລັດທິຈິດຕະນິຍົມອັດຕະວິໄສ. ໃນຄວາມຈິງແລ້ວ ຄົນແມ່ນຜະລິດຕະພັນຂອງສັງຄົມ, ຄົນກຳເນີດຂຶ້ນໃນສັງຄົມ, ສັງຄົມເປັນຜູ້ສຶກສາອົບຮົມຄົນ, ຄົນສືບທອດເອົາສິນທຳ ແລະ ປະເພນີ ຈາກສັງຄົມ ແລະ ກໍ່ສ້າງຊີວິດຂອງຕົນໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ກ.ມາກ ໄດ້ສັ່ງສອນວ່າ ທາດແທ້ຂອງຄົນ ແມ່ນ "ຜົນບວກ -

ຂອງທຸກໆການພົວພັນດ້ານສັງຄົມ" ໑).

ໃນທິດສະດີກ່ຽວກັບຄວາມຮັບຮູ້ ບັນດານັກລັດທິຊົງຕົວນິຍົມ ຢືນຢູ່ ໃນທັດສະນະລັດທິໄຮ້ຕັກປັນຍານິຍົມ ແບບຊ້າຍຈັດຂວາໂພດ, ໝາຍຄວາມວ່າ ໃນທັດສະນະປະຕິເສດຄວາມອາດສາມາດຂອງຄົນ ໃນການໃຊ້ສະຕິປັນຍາ ເພື່ອຮັບຮູ້ໂລກ ເຊິ່ງແມ່ນຄົນເອງເປັນຜູ້ສ້າງຂຶ້ນມາ.

ການດຳລົງຄົງຕົວ ໝາຍຄວາມວ່າ ການຄົງຢູ່ນັ້ນ ບໍ່ອາດສາມາດຈະຮັບຮູ້ໄດ້ດ້ວຍສະຕິປັນຍາ, ພຽງແຕ່ສາມາດຮູ້ສຶກມັນໄດ້ເທົ່ານັ້ນ. ຄົນໄດ້ ຮັບຄວາມຮູ້ສຶກກ່ຽວກັບການຄົງຢູ່ຂອງຕົນ ດັ່ງນີ້ໃນ "ການຕັດສະຮູ້". ມັນບໍ່ ສະແດງອອກໃນຄວາມຮັບຮູ້, ໃນການສົມມຸດຖານ ແລະ ໃນການສະຫຼຸບ. ບັນຫາກ່ຽວກັບສັດຈະທຳທີ່ວ່າມີຄວາມສອດຄ່ອງກັນ ລະຫວ່າງສຳນຶກຂອງພວກ - ເຮົາ ກັບໂລກພາຍນອກນັ້ນ ຕາມທັດສະນະຂອງພວກລັດທິຊົງຕົວນິຍົມແລ້ວບໍ່ມີຄວາມໝາຍຫຍັງເລີຍ. ສັດຈະທຳແມ່ນຜະລິດຕະພັນຂອງຄວາມໄຝ່ຝັນແບບປະດິດສ້າງຂອງຄົນ. ມາດຕະຖານຂອງສັດຈະທຳເປັນຜົນດີໃຫ້ແກ່ຄົນ. ມີຄົນເທົ່າໃດຄົນແລ້ວກໍຈະມີສັດຈະທຳຈຳນວນເທົ່ານັ້ນ. ທິດສະດີລັດທິຊົງຕົວ ນິຍົມເປັນປະຕິປັກຢ່າງແຂງແຮງກັບທິດສະດີປັດຊະຍາມາກ-ເລນິນກ່ຽວກັບ ສັດຈະທຳ ພາວະວິໄສ. ກ.ມາກ ໄດ້ຂຽນວ່າ ສັດຈະທຳບໍ່ແມ່ນຂອງຂ້າພະເຈົ້າຄົນດຽວ ມັນແມ່ນຂອງໝົດທຸກຄົນ. ມີສັດຈະທຳທີ່ບໍ່ຂຶ້ນກັບຈິດສຳນຶກ ບໍ່ພຽງແຕ່ຂອງບາງບຸກຄົນເທົ່ານັ້ນ ແຕ່ຍັງບໍ່ຂຶ້ນກັບຈິດສຳນຶກຂອງທຸກໆຄົນອີກ ພ້ອມ.ຕົວຢ່າງກໍຄືສັດຈະທຳເຊັ່ນ: "ປະຊາຊົນລາວໄດ້ກ້າວຂຶ້ນສູ່ເສັ້ນທາງການກໍ່ສ້າງສັງຄົມນິຍົມແລ້ວ" ນັ້ນບໍ່ຂຶ້ນກັບຈິດສຳນຶກຂອງບາງບຸກຄົນ, ທັງບໍ່ຂຶ້ນກັບຈິດສຳນຶກຂອງທົ່ວທັງມວນມະນຸດ. ຖ້າຫາກເຫດການດັ່ງກ່າວບໍ່ຖືກໃຈພວກທຶນນິຍົມ ແລະ ບັນດານັກແນວຄິດຂອງພວກເຂົາແລ້ວ ແມ່ນວ່າລັກສະນະສັດຈະທຳຂອງຄວາມເວົ້າທີ່ກ່າວຂ້າງເທິງນີ້ ຈະບໍ່ຫຼຸດຜ່ອນລົງແມ່ນແຕ່ໜ້ອຍດຽວ. ສັດຈະທຳດັ່ງກ່າວນີ້ ແມ່ນສັດຈະທຳພາວະວິໄສ. ສ່ວນບັນດານັກລັດທິຊົງຕົວນິຍົມ ບໍ່ຮັບຮູ້ວ່າມີສັດຈະທຳແບບພາວະວິໄສດັ່ງນີ້. ພວກເຂົາເຈົ້າປະຕິເສດເນື້ອໃນພາວະວິໄສໃນຄວາມຮູ້ຂອງຄົນກ່ຽວກັບໂລກອ້ອມຕົວຄົນ.

---

໑) ກ.ມາກ ແລະ ຟ.ອັງແກນ ປະມວນບົດນິພົນ, ເຫຼັ້ມທີ໓, ໜ້າ ໓.

ບັນຫາກ່ຽວກັບອິດສະຫລະພາບຂອງຄົນ ມີບົດບາດອັນໃຫຍ່ຫລວງໃນ ປັດຊະຍາລັດທິຊົງຕົວນິຍົມ. ລັດທິວັດຖຸນິຍົມສັດຈະວິພາກ ສອນວ່າ ອິດສະຫລະ-ພາບ ແມ່ນການເຄື່ອນໄຫວຂອງຄົນບົນພື້ນຖານແຫ່ງຄວາມຈຳເປັນ ທີ່ໄດ້ຮັບຮູ້ແລ້ວ. ຫລືເວົ້າອີກຢ່າງຫນຶ່ງ ໃນເມື່ອເຂົາເຈົ້າໄດ້ຮັບຮູ້ຢ່າງເລິກເຊິ່ງ ກວ່າເກົ່າ ກ່ຽວກັບກົດເກນຂະຫຍາຍຕົວຂອງທຳມະຊາດ ແລະ ສັງຄົມແລ້ວ ໃນເມື່ອນັ້ນເຂົາເຈົ້າກໍມີອິດສະຫລະພາບຫລາຍກວ່າ ແລະ ກຳນົດພຶດຕິກຳ ແລະ ການກະທຳໂດຍສອດຄ່ອງກັບກົດເກນດັ່ງກ່າວ, ສ່ວນບັນດານັກລັດທິຊົງຕົວ ນິຍົມຖືວ່າອິດສະຫລະພາບ ເປັນຄືເອກະລາດຢ່າງສົມບູນ ແລະ ເດັດຖານຂອງພຶດຕິກຳ ແລະ ການກະທຳຂອງຄົນ ໂດຍບໍ່ຂຶ້ນກັບສະພາວະການຮອບຕົວຄົນ. ພວກເຂົາເຈົ້າ ປະກາດວ່າ ຄົນມີອິດສະຫລະພາບແບບເດັດຖານ. ອິດສະຫຼະພາບແບບເດັດຖານດັ່ງກ່າວ ສາມາດໃຊ້ເປັນເຫດ ຜົນແກ້ຕົວໃຫ້ທຸກໆການກະທຳ: ເຊັ່ນ ການປຸ້ນ, ການໃຊ້ກຳລັງຮຸນແຮງ, ການຄາດຕະກຳ, ການປະຕິເສດ ການອອກແຮງງານ ແລະ ອື່ນໆ. ອັນນີ້ແມ່ນປັດຊະຍາທີ່ອະນຸຍາດໃຫ້ກະທຳທຸກຢ່າງ. ຂ້ອຍມີສິດຈະກະທຳທຸກຢ່າງທີ່ຂ້ອຍຄິດອອກ. ຊັງ ໂປນ-ຊາກ ໄດ້ຂຽນວ່າ: "ບໍ່ມີລັດທິນິຍັດນິຍົມ, ຄົນມີອິດສະຫລະພາບ, ຄົນແມ່ນອິດສະຫລະພາບ" 1). **ຄວາມເຂົ້າໃຈ**ກ່ຽວກັບອິດສະຫລະພາບດັ່ງນີ້ ແມ່ນການແກ້ຕົວໃຫ້ແກ່ທຸກໆການກະທຳ**ຕາມ**ລຳພັງໃຈ ແລະ ອະນາທິປະໄຕ. ລັດທິມາກ-ເລນິນ ໄດ້ສອນ ແລະ ຊີວິດໄດ້ຢືນຢັນວ່າ ຈະດຳລົງຊີວິດໃນສັງຄົມ-ແລະ ເປັນອິດສະຫລະພາບໂດຍບໍ່ຂຶ້ນກັບສັງຄົມນັ້ນແມ່ນບໍ່ໄດ້. ຄົນຕ້ອງຄຳນຶງເຖິງສະພາວະການ ແລະ ຜົນປະໂຫຍດຂອງຄົນຜູ້ອື່ນ.

ຖານະບົດບາດສຳຄັນໃນຄວາມເຂົ້າໃຈ ກ່ຽວກັບອິດສະ ຫລະພາບແບບ-ລັດທິຊົງຕົວນິຍົມນັ້ນ ໄດ້ແກ່ບັນຫາການຄັດເລືອກ. ຕາມຄວາມເຫັນຂອງບັນ-ດານັກລັດທິຊົງຕົວນິຍົມນັ້ນ ເມື່ອຄົນເຮົາໄດ້ຕົກຢູ່ໃນໂລກແຫ່ງຄວາມ ຢ້ານກົວແລະຫມົດຫວັງນັ້ນ ຄົນຕ້ອງຕັດສິນບັນຫາກ່ຽວກັບວ່າ ຈະກະທຳແນວໃດ ຢ່າງເປັນປະຈຳ. ແຕ່ໃນຊີວິດ ແຕ່ລະຄົນແກ້ໄຂບັນຫານີ້ແບບນີ້ຫລືແບບນັ້ນໂດຍອີງຕາມເງື່ອນໄຂທີ່ ແລະ ຄວາມສາມາດຂອງຕົນ. ສ່ວນພວກລັດທິຊົງຕົວນິຍົມ

---

1) ຊັງ ໂປນ ຊາກ "ລັດທິຊົງຕົວນິຍົມ ແມ່ນລັດທິມະນຸດສະທຳ". ມົດສະກູ, ໑໙໕໓, ຫນ້າ ໑໓

ໄດ້ຝືນກັບຄວາມເປັນຈິງ. ພວກເຂົາເຈົ້າເວົ້າວ່າ ຄົນບໍ່ຄວນຍອມກັບສະພາວະການ ໃນເມື່ອຄັດເລືອກການກະທຳ ແລະ ພຶດຕິກຳຂອງຕົນ. ການຄັດເລືອກນີ້ ພຽງແຕ່ຕັດສິນດ້ວຍໂລກພາຍໃນຂອງຄົນເທົ່ານັ້ນ, ໝາຍຄວາມວ່າ ຕັດສິນດ້ວຍເອັກສິຊຸແຕນຊີອາ (ການຄົງຢູ່) ຂອງເຂົາ. ພວກເຂົາເຈົ້າເວົ້າວ່າ ຄົນຄັດ ເລືອກເອົາຕົວເອງ. ສ່ວນລັດທິມາກຖືວ່າການທີ່ຄົນຄັດເລືອກ ບັນດາພຶດຕິກຳ ແລະ ການກະທຳຂອງຕົນນັ້ນ ກ່ອນອື່ນໝົດຕັດສິນດ້ວຍສະພາວະການພາຍນອກ. ແນ່ນອນແຕ່ລະຄົນທຳການຄັດເລືອກເອງ. ແຕ່ການ ຄັດເລືອກຂອງເຂົາບໍ່ແມ່ນເຫດການທີ່ເອກະລາດ ແລະ ບໍ່ຂຶ້ນກັບສິ່ງໃດ.ຕົວຢ່າງ ໃນເງື່ອນໄຂທຶນນິຍົມ ຄົນຈະສາມາດຄັດເລືອກເອົາແບບແຜນດຳລົງຊີວິດຢ່າງມີອິດສະຫລະພາບບໍ່ ? ຄວາມອາດສາມາດໃນການຄັດເລືອກ ລະຫວ່າງນາຍທຶນ ແລະ ກຳມະກອນນັ້ນ ແຕກຕ່າງກັນຢ່າງ ຫລາຍທີ່ສຸດ. ການຄັດເລືອກນີ້ ກ່ອນອື່ນໝົດ ຕັດສິນດ້ວຍຖານະດ້ານສັງຄົມຂອງພວກເຂົາເຈົ້າ, ແຕ່ຫາກ ບໍ່ແມ່ນຕັດສິນດ້ວຍໂລກພາຍໃນຂອງພວກເຂົາເຈົ້າ.

ໃນທີ່ສຸດ ຄວາມເຂົ້າໃຈກ່ຽວກັບອິດສະຫລະພາບ ແບບລັດທິຈິງຕົວ ນິຍົມ ມີລັກສະນະໄຮ້ເຫດຜົນເປັນພິເສດ. ມັນກ່າວ ວ່າບໍ່ມີຕົ້ນເຫດອັນມີສະຕິ ຂອງການກະທຳຂອງຄົນ ໝາຍຄວາມວ່າການກະທຳທີ່ອີງໃສ່ຄວາມຮັບຮູ້. ພວກເຂົາເຈົ້າຖືວ່າອິດສະຫລະພາບແມ່ນການເປັນໄປຕາມມີຕາມເກີດ ເຊິ່ງສະຕິ-ປັນຍາຂອງຄົນບໍ່ສາມາດຈະເຂົ້າໃຈໄດ້, ອິດສະຫລະພາບນີ້ຄຸມຄອງຄົນ ແທນທີ່ຕອງແມ່ນຄົນຄຸມຄອງອິດສະຫລະພາບ. ການຄັດເລືອກກໍ່ແມ່ນແບບບໍ່ມີເຫດ-ຜົນເຊັ່ນກັນ, ເນື່ອງຈາກວ່າມັນບໍ່ໄດ້ອີງໃສ່ສະພາວະການ, ອີງໃສ່ການ ພົວພັນກັບຄົນຜູ້ອື່ນ, ຫາກແມ່ນພຽງແຕ່ອີງໃສ່ໂລກພາຍໃນຂອງຄົນເທົ່ານັ້ນ.

ດັ່ງນີ້ ດ້ານຕົວຈິງແຫ່ງອິດສະຫລະພາບຂອງຄົນໄດ້ຕົກເຣັຍອອກຈາກ - ຄວາມເຂົ້າໃຈກ່ຽວກັບອິດສະຫລະພາບແບບລັດທິຈິງຕົວນິຍົມ. ບັນດານັກລັດທິຈິງຕົວນິຍົມ ບໍ່ຜູກພັນອິດສະຫລະພາບກັບຄວາມຮັບຮູ້ກົດເກນທຳມະຊາດ, ການຕໍ່ສູ້ຕ້ານແອກກົດໜ່ວງທາງສັງຄົມ, ກໍ່ສ້າງສັງຄົມໃໝ່, ການຂະຫຍາຍ ຕົວຂອງກະໂຕຄົນເອງ ແລະ ອື່ນໆ. ອິດສະຫລະພາບຂອງພວກເຂົາເຈົ້າ ໄດ້ກາຍເປັນການກະທຳອັນຮຸນແຮງ. ດ້ວຍເຫດນັ້ນທິດສະດີລັດທິຈິງຕົວນິຍົມກ່ຽວກັບອິດສະຫລະພາບນັ້ນຈິ່ງມີລັກສະນະປະຕິການ. ມັນບໍ່ອຳນວຍໃຫ້ແກ່ ການ

ເສີມຂະຫຍາຍອິດສະຫລະພາບຂອງຄົນ, ຫາກກົງກັນຂ້າມ, ມັນນຳເອົາ ຄົນໃຫ້ເຫີນຫ່າງຈາກອິດສະຫລະພາບອັນແທ້ຈິງໃຫ້ເຂົ້າໄປສູ່ໂລກແຫ່ງອາລົມສ່ວນຕົວຂອງຕົນເອງ.

ທົ່ວທັງປັດຊະຍາລັດທິຊີວິດຕົວນິຍົມ ແມ່ນການແກ້ຫນ້າໃຫ້ແກ່ລັດທິສ່ວນຕົວ, ລັດທິເອກະຊົນທີ່ສະແດງອອກຢ່າງສູດຂີດ. ມັນປົດອາວຸດຂອງຄົນໂດຍພິສູດວ່າໃນທຸກໆດ້ານ ຄົນຕ້ອງອີງໃສ່ແຕ່ຕົນເອງເທົ່ານັ້ນ, ຄົນຜູ້ອື່ນຕ້ອງຖືເປັນສັດຕູທີ່ອາດຈະເປັນໄປໄດ້ຂອງຕົນ, ດຳລົງຊີວິດເພື່ອຕົນຜູດຽວ. ດັ່ງນັ້ນ ປັດຊະຍາລັດທິຊີວິດຕົວນິຍົມ ເວົ້າລວມແລ້ວ ບໍ່ອຳນວຍໃຫ້ແກ່ການໄຈ້ແຍກທີ່ຕັ້ງ ຕົວຈິງ ແລະ ບົດບາດຂອງຄົນໃນໂລກ. ມັນມີລັກສະນະປະຕິການ.

## ໕. ປັດຊະຍາ ສາຂາຟຣັງເຟີດ

ຊື່ຂອງທ່າອຽງປັດຊະຍານາຍທຶນ ສາ ຂານີ້ຕິດພັນກັບເມືອງ ຟຣັງເຟີດ-ແຄມນ້ຳແມນ ຢູ່ເຢຍລະມັນ. ໃນດ້ານຮູບນອກ ປະຫວັດສາດຂອງສາຂາຟຣັງເຟີດ ໄດ້ເລີ່ມແຕ່ປີ ໑໙໓໐ ແຕ່ທັດສະນະຂອງຜູ້ສ້າງຕັ້ງມັນໄດ້ຕັ້ງຂຶ້ນໃນຊຸມປີ ໑໙໔໐. ບັນດາຜູ້ຕາງຫນ້າຕົ້ນຕໍຣຸ່ນກ່ອນຂອງສາຂານີ້ ແມ່ນ ມ.ໂຮນຄາຍ-ແມນ ( ໑໘໙໕-໑໙໗໓), ຕ. ອາໂດນໂນ ( ໑໙໐໓-໑໙໖໙ ),ຟ. ໂປລົກ ( ໑໘໙໔-໑໙໗໐ ), ກ. ມາກກູເຊ ( ໑໘໙໘-໑໙໗໙ ),ແອ.ໂຟຣມ (໑໙໐໐-໑໙໘໐). ໃນຈຳນວນຄົນຣຸ່ນໃຫມ່ນັ້ນ ຢູ.ຄາແບນມາສ,ໂອ.ແນກ, ອາ.ສະມິດ,ກ.ໂອເຟ ແລະ ອື່ນໆ ມີຊື່ລືຊາກວ່າຫມູ່.

ບັນດານັກ ປັດຊະຍາສາຂາ ຟຣັງເຟີດ ຮຽກຕົນເປັນນັກລັດທິມາກ ແບບໃຫມ່, ແລະ ອອກຫນ້າພາຍໃຕ້ຄຳຂວັນ "ລັດທິມາກແບບໃຫມ່" ແລະ ປະກາດແນວທາງຈະ "ປັບປຸງ" ທິດສະດີມາກ.ໃນຕົວຈິງແລ້ວ ພວກເຂົາ ເຈົ້າເປັນຕົວແທນໃຫ້ແກ່ແນວຄິດນາຍທຶນນ້ອຍ, ໂດຍເອົາແນວຄິດລັດທິມາກ ມາປົກປິດລັດທິສັງຄົມນິຍົມນາຍທຶນນ້ອຍ. ວ.ອີ.ເລນິນ ໄດ້ຂຽນວ່າ: "ສັດຈະວິພາກຂອງປະຫວັດສາດ ຢູ່ບ່ອນວ່າ ໄຊຊະນະທາງທິດສະດີຂອງລັດທິມາກ ໄດ້ບັງຄັບໃຫ້ພວກສັດຕູຂອງລັດທິມາກຈຳຕ້ອງຖອດເສື້ອຊຸມທີ່ສະແດງຕົວເປັນພວກ

ນິຍົມລັດທິມາກ" ໑). ເຖິງວ່າບັນດາຜູ້ຕາງໜ້າຂອງສາຂາ ຟຣັງເຟີດ ຈະປະກາດຕໍາໜິວິຈານລັດທິທຶນນິຍົມກໍ່ຕາມ, ແຕ່ໃນຕົວຈິງແລ້ວ ພວກເຂົາເຈົ້າມິແຕ່ ຮັບໃຊ້ໃຫ້ລັດທິທຶນນິຍົມເທົ່ານັ້ນ. ນາຍທຶນໝູນໃຊ້ ທິດສະດີຂອງ ພວກເຂົາເຈົ້າເປັນພາຫະນະຢຸບຍອບລັດທິມາກ-ເລນິນ ແລະ ສັງຄົມນິຍົມໃນ ຕົວຈິງ. ກະໂຕຕົວແທນຫຼາຍຄົນຂອງສາຂານີ້ ມີທັດສະນະຕ້ານກອມມູນິດ ຢ່າງຈະແຈ້ງ.

ບັນດານັກປັດຊະຍາສາຂາ ຟຣັງເຟີດ ແກ້ໄຂບັນຫາພື້ນຖານຂອງປັດຊະ-ຍາໂດຍອີງໃສ່ທັດສະນະຂອງລັດທິຈິດຕະນິຍົມອັດຕະວິໄສ. ຕາມຄວາມ ເຫັນຂອງພວກເຂົາເຈົ້າແລ້ວ ເຈົ້າກໍາດົນນັ້ນເອງ ເປັນພື້ນຖານຕົ້ນຕໍຂອງທຸກສິ່ງທຸກຢ່າງທີ່ຄົງຕົວຢູ່. ພາວະກໍາ ບໍ່ອາດຈະຄົງຢູ່ ໄດ້ໂດຍປາສະຈາກເຈົ້າກໍາ. ຕ.ອາໂດນໂນ ຂຽນວ່າ ຖ້າຫາກປາສະຈາກເຈົ້າກໍາແລ້ວ ພາວະກໍາຈະກາຍເປັນສິ່ງທີ່ບໍ່ມີຄວາມໝາຍ, ເປັນສິ່ງໂລງເລງ. ລັກສະນະຈິດຕະນິຍົມ ຂອງສາຂາ ຟຣັງເຟີດ ໄດ້ສະແດງອອກຢ່າງຈະແຈ້ງກວ່າໝູ່ ໃນການອະທິ ບາຍຄວາມຈໍາເປັນທາງປະຫວັດສາດ. ຕາມຄວາມເຫັນຂອງພວກເຂົາເຈົ້າແລ້ວບໍ່ແມ່ນການຜະລິດທາງວັດຖຸ ແລະ ກົດເກນພາວະວິໄສເປັນສິ່ງກໍານົດບາດກ້າວແຫ່ງການຂະຫຍາຍຕົວທາງສັງຄົມ, ແຕ່ຫາກແມ່ນຈິດສໍານຶກອັດຕະວິໄສ ຂອງບັນດານັກການເມືອງເປັນສິ່ງກໍານົດບາດກ້າວດັ່ງກ່າວ.

ເມື່ອອະທິບາຍຂະບວນວິວັດແຫ່ງການຂະຫຍາຍຕົວ ພວກເຂົາເຈົ້າ ຢືນຢູ່ໃນທັດສະນະທີ່ຮຽກກັນເປັນ "ສັດຈະວິພາກແບບປະຕິເສດ". ທາດແທ້ ຂອງ "ສັດຈະວິພາກແບບປະຕິເສດ" ຂອງພວກເຂົາເຈົ້ານັ້ນ ແມ່ນການເຮັດ ໃຫ້ຄວາມເຂົ້າໃຈກ່ຽວກັບ "ການປະຕິເສດ" ຂອງເຮເກນ ມີລັກສະນະເດັດ - ຖານອັນ. ອີງໃສ່ການປະຕິເສດແບບເດັດຖານແລ້ວ ພວກເຂົາເຈົ້າຖືວ່າ ສັດຈະວິພາກຕ້ອງຮຽກຮ້ອງໃຫ້ມີການປະຕິເສດຕົນເອງເຊັ່ນດຽວກັນ. ຖ້າຫາກ-ເຮເກນ ແລະ ມາກ ຖືການປະຕິເສດແມ່ນ ໄລຍະໃດໜຶ່ງຂອງການ ຂະຫຍາຍຕົວ, ແມ່ນໄລຍະໃດໜຶ່ງ ຂອງການພົວພັນກັນລະຫວ່າງອັນໃໝ່ແລະອັນເກົ່າ, ເຊິ່ງໃນນັ້ນ ອັນໃໝ່ໄດ້ຮັກສາທຸກສິ່ງທີ່ລໍ້າຄ່າຂອງອັນເກົ່າແລ້ວ ,

---

໑) ວ.ອີ.ເລນິນ. ປະມວນບົດນິພົນຄົບຊຸດ. ເຫຼັ້ມທີ ໒໙, ໜ້າ ໙.

ແມ່ນວ່າ "ສັດຈະວິພາກແບບປະຕິເສດ" ຮຽກຮ້ອງໃຫ້ດັບສູນອັນເກົ່າ ຢ່າງເດັດຖານ ແລະ ເຕັມສ່ວນ. ກ.ມາກກູເຊ ໄດ້ປະກາດອອກມາວ່າ ຈຳຕ້ອງມີ "ການປະຕິເສດທີ່ຍິ່ງໃຫຍ່" ຕໍ່ທຸກຢ່າງທີ່ຄົງຢູ່, ເພື່ອຈຳຕ້ອງມີ ການຕັດຂາດກັບທຸກສິ່ງທີ່ຄົງຢູ່ຢ່າງເຕັມສ່ວນ ຢ່າງສົນເຊີງ ແລະ ຢ່າງເດັດຖານ. ໂດຍປະກາດທວງໃຫ້ມີ "ການປະຕິເສດທີ່ຍິ່ງໃຫຍ່", ປະກາດແນວຄິດດັບສູນລະບອບສັງຄົມ ທີ່ຄົງຢູ່ແລ້ວ, ບັນດານັກປັດຊະຍາສາຂາ ຟຣັງເຝີດ ບໍ່ໄດ້ສະເໜີໂຄງການທີ່ຄັກແນ່ແມ່ນແຕ່ໂຄງການດຽວ. ພວກເຂົາເຈົ້າບໍ່ຮູ້ວ່າ ແມ່ນຫຍັງຈະມາແທນທີ່ລະບອບສັງຄົມທີ່ຄົງຢູ່ ພາຍຫລັງທີ່ດັບສູນມັນໄປແລ້ວ. ຈຸດປະສົງຂອງພວກເຂົາເຈົ້າ ແມ່ນດັບສູນ, ທັບມ້າງໂດຍປາສະຈາກການກໍ່ສ້າງແມ່ນແຕ່ປະການໃດ.

ກ່ຽວກັບທິດສະດີຄວາມຮັບຮູ້ ສາຂາຟຣັງເຝີດ ຢືນຢູ່ໃນທັດສະນະລັດທິໄຮ້ຕັກປັນຍານິຍົມສຸດຂີດ, ໝາຍຄວາມວ່າ, ພວກເຂົາເຈົ້າປະຕິເສດຄວາມສາມາດຂອງສະຕິປັນຍາຂອງພວກເຮົາ ທີ່ຈະຮັບຮູ້ໂລກຮອບຕົວພວກເຮົາແລະຮັບຮູ້ກະໂຕເຮົາເອງ. ເຊັ່ນຕົວຢ່າງ ຕ.ອາໂດນໂນ ໄດ້ປະຕິເສດຕັກກະ ສາດເວົ້າລວມ. ເຂົາຂຽນວ່າ ຈິນຕະນາການແບບມີຄວາມເຂົ້າໃຈນັ້ນ ແມ່ນເລື່ອງໄຮ້ສາລະ. "ສັດຈະວິພາກແບບປະຕິເສດ" ຮຽກຮ້ອງໃຫ້ປະຕິເສດ - ສະຕິປັນຍາ. ສະຕິປັນຍາ ປຽບຄື ແມງໄມ້ທີ່ບິນໄປ ສູ່ແສງສະຫວ່າງ ແລະຕຳຖືກແກ້ວ. ຕ.ອາໂດນໂນ ຢືນຢັນວ່າ ເພື່ອຈະກາຍເປັນສັດຈະທຳ ຈິນຕະນາການຕ້ອງຄັ້ນຄິດເພື່ອຕ້ານກະໂຕຕົນເອງຄືກັນ.

ທັດສະນະກ່ຽວກັບສັງຄົມສາດຂອງບັນດານັກປັດຊະຍາສາຂາຟຣັງເຝີດນຳໄປສູ່ຂໍ້ວິນິດໄສພື້ນຖານຕໍ່ໄປນີ້: ກ) ພື້ນຖານແຫ່ງການຂະຫຍາຍຕົວ ທາງສັງຄົມນັ້ນ ບໍ່ແມ່ນການຜະລິດຊັບສິນວັດຖຸ, ແຕ່ຫາກແມ່ນຈິດສຳນຶກ, ຈິດຕະສາດຂອງຄົນ ແລະ ສັນຊາດຍານຂອງພວກເຂົາເຈົ້າ; ຂ) ໃນການພົວພັນ ລະຫວ່າງເສດຖະກິດເປັນຝ່າຍໜຶ່ງ ແລະ ແນວຄິດ ແລະ ການເມືອງເປັນ ອີກຝ່າຍໜຶ່ງນັ້ນ ລັດ, ການເມືອງມີບົດບາດທີ່ສຳຄັນ ແລະ ຕັດສິນຊີ້ຂາດ; ຄ) ທິດສະດີ ເລນິນ ກ່ຽວກັບການປະຕິວັດສັງຄົມນິຍົມນັ້ນ ໝູນໃຊ້ສຳລັບລັດທິທຶນນິຍົມສະໄໝໃໝ່ບໍ່ໄດ້; ງ) ຊົນຊັ້ນກຳມະກອນໄດ້ ສູນເສຍລັກສະນະ ປະຕິວັດຂອງຕົນແລ້ວ, ກຳລັງແຮງແຫ່ງການປະຕິວັດໃນມື້ນີ້ແມ່ນຊາວໜຸ່ມ,ປັນຍາ

ຈົນ, ກຳມາຈຶບຈິລະຈັດ ( ໝາຍຄວາມວ່າບັນດາຜູ້ຄົນທີ່ຫລົ້ມຈົມ, ທີ່ຖືກຕັດຂາດຈາກຊົນຊັ້ນເດີມຂອງຕົນ, ບໍ່ເຂົ້າຮ່ວມໃນການຜະລິດສັງຄົມ ); ຈ) ຕ້ອງເລີ່ມຕົ້ນການປະຕິວັດໂດຍເຮັດການປະຕິວັດແນວຄິດ.

ດັ່ງນັ້ນ "ລັດທິມາກແບບໃໝ່" ຂອງບັນດານັກປັດ ຊະຍາ ສາຂາ ຟຣັງເຝີດ ນັ້ນ ບໍ່ແມ່ນການສືບຕໍ່ ແລະ ເສີມຂະຫຍາຍທິດສະດີມາກ-ເລນິນ ດັ່ງທີ່ພວກເຂົາເຈົ້າໄດ້ປະກາດອອກມາ, ແຕ່ຫາກແມ່ນການບິດເບືອນແລະປະຕິ - ເສດທິດສະດີມາກ-ເລນິນ. ປັດຊະຍານີ້ໄດ້ປະລະສັດຈະວິພາກແບບວັດຖຸນິຍົມ ແລະ ຄວາມເຂົ້າໃຈແບບວັດຖຸນິຍົມ ກ່ຽວກັບປະຫວັດສາດ. ໂດຍຕຳໜິ ວິຈານທັງລັດທິທຶນນິຍົມ, ທັງລັດທິສັງຄົມນິຍົມ ຕົວຈິງ, ພວກເຂົາບໍ່ໄດ້ບອກ - ແລວທາງອະນາຄົດທາງສັງຄົມແມ່ນແຕ່ປະການໃດ, ແລະ ນຳເອົາຜູ້ສະໜັບສະໜູນເຂົ້າສູ່ທ່າຈົນຕາແຈທີ່ບໍ່ມີທາງອອກ. ທິດສະດີຂອງສາຂາ ຟຣັງເຝີດ-ນັ້ນ ພວກລັດທິສວຍໂອກາດ ແລະ ພວກລັດທິແກ້ໄດ້ຖອດຖອນອອກມາ ເປັນແນວຄິດຕ້ານກອມມູນິດ, ແລະ ໝູນໃຊ້ແນວຄິດດັ່ງກ່າວນີ້ໃນການຕໍ່ສູ້ ຕ້ານແນວຄິດມາກ-ເລນິນ ຕ້ານຂະບວນການກອມມູນິດສາກົນ ແລະ ຂະບວນການກຳມະກອນເວົ້າລວມ.

ເນື່ອງຈາກວ່າມີທ່າອ່ຽງ ແລະ ສາຂາທີ່ແຕກຕ່າງກັນ ຈຳນວນຫລວງ - ຫລາຍ ໃນປັດຊະຍານາຍທຶນ ບັນດາຜູ້ທີ່ນິຍົມປັດຊະຍາດັ່ງກ່າວ ຈຶ່ງພາກັນຍົກຍໍເອົາເຫດການນີ້ຂຶ້ນເປັນ ການພິສູດວ່າປັດຊະຍາຂອງຕົນມີການຂະຫຍາຍຕົວຢ່າງຟົດ ຟື້ນ. ໃນຕົວຈິງແລ້ວ ອັນນີ້ສະແດງເຖິງວິກິດການຂອງແນວຄິດ ປັດຊະຍາແບບນາຍທຶນ. ຖ້າຫາກປັດຊະຍາໃນສະໄໝກ່ອນລັດທິມາກ, ລວມທັງປັດຊະຍານາຍທຶນ ( ໃນເມື່ອນາຍທຶນໄດ້ກ້າວຂຶ້ນກຳອຳນາດນັ້ນ ) ໄດ້ເຮັດໃຫ້ຄວາມຮູ້ຂອງມວນມະນຸດອຸດົມໄປດ້ວຍແນວຄິດທີ່ເລິກເຊິ່ງຈຳນວນຫລວງ - ຫລາຍແລ້ວ ແມ່ນວ່າປັດຊະຍານາຍທຶນສະໄໝໃໝ່ໄດ້ປະຕິເສດ ຜົນສຳເລັດຂອງຜູ້ເດີນກ່ອນຂອງຕົນ, ປະຕິເສດລັດທິວັດຖຸນິຍົມ, ລັດທິອະເທບສັດຈະວິ-ພາກ, ແນວຄິດກ້າວໜ້າທາງສັງຄົມ ແລະ ອື່ນໆ. ປະຈຸບັນນີ້ປັດຊະຍານາຍທຶນໄດ້ເຫີນຫ່າງອອກຈາກທັດສະນະວິທະຍາສາດ ແລະ ໄປປົກປ້ອງທຸກສິ່ງ ທີ່ຫລ້າສະໄໝ, ປົກປ້ອງສິ່ງທີ່ຝືນວິທະຍາສາດ ແລະ ຮັບໃຊ້ກຳລັງປະຕິການ.

ໃນຍຸກນີ້ ພຽງແຕ່ປັດຊະຍາມາກ-ເລນິນເທົ່ານັ້ນ ທີ່ມີຄວາມຮູ້ອັນແທ້ຈິງ

ກ່ຽວກັບກົດເກນລວມທີ່ສຸດ ແຫ່ງການຂະຫຍາຍຕົວຂອງທຳມະຊາດ, ສັງຄົມ
ແລະກະໂຕຈິນຕະນາການຂອງຄົນນັ້ນເອງ. ສ່ວນປະກອບທີ່ສຳຄັນທີ່ສຸດ ຂອງ
ລັດທິມາກ-ເລນິນ ແມ່ນວິທີລວມທົ່ວໄປກ່ຽວກັບຄວາມຮັບຮູ້ ແລະ ດັດສ້າງ
ຄວາມເປັນຈິງແບບປະຕິວັດ. ມັນແມ່ນອາວຸດດ້ານແນວຄິດຂອງຊົນຊັ້ນ ກຳມາ
ຊີບ, ແມ່ນການສະແດງອອກທາງທິດສະດີປັດຊະຍາ ກ່ຽວກັບຜົນປະໂຫຍດ -
ຂອງຊົນຊັ້ນກຳມາຊີບ, ເຊິ່ງສອດຄ່ອງກັບກົດເກນພາວະວິໄສ ແຫ່ງການຂະ
ຫຍາຍຕົວທາງສັງຄົມ, ແລະ ຮັບໃຊ້ໃຫ້ແກ່ການເຄື່ອນເໜັງຂອງປະຫວັດ -
ສາດ ບົນເສັ້ນທາງແຫ່ງສັນຕິພາບແລະ ຄວາມກ້າວໜ້າ.

# ລັດທິວັດຖຸນິຍົມ
# ປະຫວັດວິພາກ

11*

# ພາກທີ ໜຶ່ງ
# ລັດທິວັດຖຸນິຍົມວິທະຍາສາດ ແມ່ນທິດສະດີ ປັດຊະຍາ ກ່ຽວກັບ ສັງຄົມ

ຜົນງານອັນຍິ່ງໃຫຍ່ທາງດ້ານວິທະຍາສາດ ຂອງ ກ.ມາກ ແລະ ຟ.ອັງແກນ ກໍຄືພວກທ່ານບໍ່ພຽງແຕ່ໄດ້ໄຈ້ແຍກທາດແທ້ວັດຖຸນິຍົມ ສົດຈະວິພາກຂອງການຂະຫຍາຍຕົວຂອງທຳມະຊາດເທົ່ານັ້ນ, ແຕ່ຍັງໄດ້ໄຈ້ແຍກທາດແທ້ ຂອງການຂະຫຍາຍຕົວດ້ານສັງຄົມອີກພ້ອມ. ພວກທ່ານໄດ້ສ້າງຕັ້ງວິທະຍາສາດປັດຊະຍາ ກ່ຽວກັບສັງຄົມ ຄືລັດທິວັດຖຸນິຍົມປະຫວັດວິພາກ.

## ໑. ການກຳເນີດຂອງລັດທິວັດຖຸນິຍົມປະຫວັດວິພາກ

ນັບແຕ່ສະໄໝປະຖົມບູຮານພຸ້ນເປັນຕົ້ນມາ ທີ່ຄົນໄດ້ສຶກສາຄົ້ນຄວ້າຫລາຍປະກົດການທຳມະຊາດຢ່າງມີຜົນສຳເລັດ, ໄດ້ວັດແທກທີ່ດິນ, ຮູ້ຈັກກຳນົດທິດທາງຂອງພົນທີ່, ຮູ້ຈັກເດີນເຮືອຕາມທະເລ ແລະ ມະຫາສະໝຸດ, ຮູ້ຈັກປິ່ນປົວພະຍາດ. ກົດເກນວິທະຍາສາດຂອງບັນດານັກປາດ ນັກປັດຊະຍາ ຊາວກະເຣັກບູຮານ, ເຊັ່ນ ປີຕາກໍ, ເດໂມກຣິດ ແລະ ອັກຊີແມັດ ນັ້ນໄດ້ ຄອບຄອງຢູ່ ເປັນເວລາຫລາຍສະຕະວັດ. ມາກ ແລະ ອັງແກນ ທາກໍ່ຄົ້ນພົບ ກົດເກນພາວະວິໄສຂອງການຂະຫຍາຍຕົວດ້ານສັງຄົມ ພຽງແຕ່ໃນກາງສະຕະວັດທີ ໑໙ ເທົ່ານັ້ນ. ຈະອະທິບາຍເຫດການນີ້ຢ່າງໃດ ? ມັນຢູ່ບ່ອນວ່າ ຊີວິດຂອງສັງຄົມມີຫລາຍຮູບຫລາຍສີກວ່າປະກົດການທຳມະຊາດ. ຊີວິດຂອງສັງຄົມແມ່ນການປະສົມປະສານດ້ານ ແລະ ອົງເຂດຂອງຄວາມເປັນຈິງທາງ ສັງຄົມອັນສັບສົນ ເຊັ່ນການປະສົມປະສານກັນ ລະຫວ່າງວັດຖຸ ແລະ ຈິດໃຈ, ລະ

ຫວ່າງສ່ວນຕົວກັບສ່ວນລວມ, ລະຫວ່າງຊາດ ແລະ ຊົນຊັ້ນ ແລະ ອື່ນໆ . ເຊັ່ນ ທຸກໆຄົນຮັບຮູ້ປະກົດການທຳມະຊາດ ດ້ວຍຄວາມພະຍາຍາມຮຽນຮູ້ ມັນໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ເພື່ອຫມູນໃຊ້ເຂົ້າໃນການເຄື່ອນໄຫວຕົວຈິງ . ສ່ວນຄວາມຮັບຮູ້ປະກົດການຂອງຊີວິດທາງສັງຄົມນັ້ນ ຕົວແທນຂອງບັນດາ ຊັ້ນຄົນໃນສັງຄົມມີທ່າທີຢ່າງແຕກຕ່າງກັນ, ໂດຍຢືນຢູ່ໃນທັດສະນະສິດຜົນປະ - ໂຫຍດທາງຊົນຊັ້ນ.

ລັດທິວັດຖຸນິຍົມປະຫວັດວິພາກ ກໍ່ຄືທິດທາງປັດຊະຍາມາກ ໄດ້ກຳເນີດ ຂຶ້ນພາຍໃຕ້ເງື່ອນໄຂທີ່ຄວາມຂັດແຍ່ງ ລະຫວ່າງຊົນຊັ້ນໃນສັງຄົມທຶນນິຍົມ ຮ້າຍແຮງຂຶ້ນ, ແລະ ຊົນຊັ້ນກຳມາຊີບໄດ້ປະກົດຕົວຂຶ້ນບົນເວທີແຫ່ງການຕໍ່ສູ້ ຊົນຊັ້ນ, ເຊິ່ງມີຈຸດປະສົງທີ່ສອດຄ່ອງກັບການຂະຫຍາຍຕົວຂອງຄວາມກ້າວ ຫນ້າທາງສັງຄົມ, ສອດຄ່ອງກັບຜົນປະໂຫຍດພື້ນຖານຂອງຊາວຜູ້ອອກແຮງງານທຸກຄົນ. ຄວາມພະຍາຍາມຂອງຊົນຊັ້ນກຳມາຊີບ ຢາກຈະດັບສູນທຸກໆຮູບ ແບບຂອງການກົດຂີ່ຂູດຮີດທາງສັງຄົມ ແລະ ທາງຊົນຊາດ, ຢາກຈະກໍ່ສ້າງສັງຄົມແຫ່ງຄວາມເປັນທຳທາງສັງຄົມ ແລະ ສິດສະເຫມີພາບນັ້ນ ໄດ້ຮຽກຮ້ອງ ໃຫ້ຄົ້ນພົບ ແລະ ຄົ້ນຄວ້າບັນດາກົດເກນ ແລະ ທ່າອຽງແຫ່ງການຂະຫຍາຍ ຕົວຂອງສັງຄົມ.

ການຂະຫຍາຍຕົວຂອງແນວຄິດປັດຊະຍາ ແລະ ສັງຄົມສາດ * ໃນໄລຍະກ່ອນນັ້ນ ໄດ້ສ້າງເງື່ອນໄຂໃຫ້ແກ່ການກຳເນີດຂອງລັດທິວັດຖຸນິຍົມປະຫວັດວິພາກ. ໃນຊົ່ວ ໄລຍະຫລາຍສະຕະວັດມາແລ້ວ ທີ່ຄົນໄດ້ພະຍາຍາມເຂົ້າໃຈວ່າ ສັງຄົມແມ່ນຫຍັງ, ກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມເປັນຄືແນວໃດ, ເຫດຜົນ ແລະ ກຳລັງຊຸກດັນສົງຄາມ, ການປະຕິວັດ ແລະ ການ ຫັນປ່ຽນທາງສັງຄົມນັ້ນເປັນຄືແນວໃດ. ບັນດານັກແນວຄິດໃນອະດີດໄດ້ຕອບ ບັນຫານີ້ ຢ່າງແຕກຕ່າງກັນ. ພວກເຂົາເຈົ້າຫລາຍຄົນຖືວ່າຊີວິດຂອງສັງຄົມແມ່ນການສະແດງຕົວຂອງອຳນາດພະເຈົ້າ,ຫລືຍົກເອົາກົດເກນທຳມະຊາດເຂົ້າມາ

---

* ສັງຄົມສາດ ແມ່ນວິທະຍາສາດກ່ຽວກັບສັງຄົມ, ທີ່ເປັນລະບົບຄົບຖ້ວນແລະກ່ຽວກັບບາງສະຖາບັນສັງຄົມ ໂດຍສະເພາະ ( ເຊັ່ນລັດ, ກົດຫມາຍ , ສິນທຳ ແລະ ອື່ນ ໆ).

ຫມູນໃຊ້ເພື່ອອະທິບາຍປະກົດການໃນສັງຄົມ, ຖືວ່າການຂະຫຍາຍຕົວ ທາງດ້ານສັງຄົມນອນຢູ່ໃນ ຄວາມບັງເອີນຫລືເປັນສິ່ງທີ່ຫລີກລ່ຽງບໍ່ໄດ້, ຖື ສຳຄັນບົດບາດຂອງບຸກຄົນໃນປະຫວັດສາດ ( ເຊັ່ນບົດບາດຂອງບັນດາເຈົ້າຊີວິດ , ແມ່ທັບ, ນັກແນວຄິດ, ນັກການເມືອງ ). ອັນນີ້ແມ່ນຄວາມເຂົ້າໃຈ ກ່ຽວກັບວິທະຍາສາດຢ່າງບິດເບືອນ, ແບບຈິດຕະນິຍົມ, ພ້ອມກັນນັ້ນ ບັນດາ ນັກແນວຄິດກ່ອນສະໄຫມມາກ ເຄີຍໄດ້ປະກອບແນວຄິດທີ່ຖືກຕ້ອງຫລາຍຂໍ້ ກ່ຽວກັບບາດກ້າວແຫ່ງການຂະຫຍາຍຕົວທາງສັງຄົມ.

ບັນດານັກລັດທິວັດຖຸນິຍົມຊາວຝະລັ່ງ ສະໄຫມສະຕະວັດທີ ໑໘ (ດີເດີໂຣ, ໂກນບັກ, ເກນເວຊີ ) ໄດ້ຢັ້ງຢືນວ່າ ຄົນບໍ່ມີແນວຄິດມາແຕ່ເກີດ. ຄົນພ້ອມດ້ວຍອຸດົມຄະຕິ, ຜົນປະໂຫຍດ, ຄວາມພະຍາຍາມ ແມ່ນ ຜະລິດຕະພັນ - ຂອງສັງຄົມ. ແຕ່ພວກເຂົາເຈົ້າບໍ່ສາມາດຖອດຖອນຂໍ້ສະຫລຸບ ອັນຈຳເປັນ - ກ່ຽວກັບເລື່ອງທີ່ວ່າ ຖ້າຢາກປ່ຽນແປງຄົນ ກ່ອນອື່ນຫມົດຕ້ອງປ່ຽນແປງທົ່ວທັງເງື່ອນໄຂສັງຄົມກ່ອນ. ກ.ມາກແລະ ຟ.ອັງແກນ ໄດ້ສະຫລຸບດັ່ງຕໍ່ໄປນີ້ : "ຖ້າຫາກສະພາວະການໄດ້ສ້າງຄຸນສົມບັດຂອງຄົນຂຶ້ນມາແລ້ວ, ແມ່ນເຫັນໄດ້ວ່າ ຕ້ອງເຣັດໃຫ້ສະພາວະການມີລັກສະນະມະນຸດສະທຳ" ໑) .

ບັນດານັກປະຫວັດສາດນາຍທຶນຊາວຝະລັ່ງ (ກີໂຊ, ເຕີຣີ. ມີເຍ )ພະຍາຍາມເຂົ້າໃຈວ່າ ປະຫວັດສາດຂອງການປະຕິວັດນາຍທຶນ ເປັນຄືການ ສະແດງຕົວຂອງການຕໍ່ສູ້ລະຫວ່າງບັນດາຊົນຊັ້ນທີ່ເປັນປໍລະປັກກັນ; ບັນດານັກ - ເສດຖະສາດຊາວອັງກິດ (ສະມິດ, ຣິກາກໂດ ) ຄົ້ນຄວ້າພື້ນຖານແຫ່ງການຄົງຢູ່ຂອງບັນດາຊົນຊັ້ນໃນທາງເສດຖະກິດ; ທິດສະດີຕ່າງໆຂອງບັນດານັກສັງຄົມນິຍົມ ແບບໄຝ່ຝັນລອຍເມກ (ແຊງຊີມົງ, ຟູຣິເອ, ໂອແວນ ) ໄດ້ ຕຳຫນິວິຈານຂໍ້ບົກພ່ອງຂອງລັດທິທຶນນິຍົມ, ໄດ້ຊີ້ແຈງບາງຈຸດພິເສດຂອງສັງ ຄົມກອມມູນິດນິຍົມໃນອະນາຄົດ. ເຣເກນ ຕົວແທນ ຜູ້ມີຊື່ສຽງຂອງລັດທິຈິດຕະນິຍົມເຢຍລະມັນສະໄຫມສະຕະວັດທີ ໑໘-໑໙ ໄດ້ຍົກແນວຄິດກ່ຽວກັບການ ຂະຫຍາຍຕົວແບບສັດຈະວິພາກຂຶ້ນມາ. ທ່ານຖືວ່າປະຫວັດສາດເປັນຂະບວນວິວັດອັນຫນຶ່ງອັນດຽວ ແລະ ຖືກຕ້ອງຕາມກົດເກນແຫ່ງການຂະຫຍາຍຕົວ ກ້າວໄປ

---

໑) ກ.ມາກແລະ ຟ.ອັງແກນ. ນິພົນ,ເຫລັ້ມ ໔ ຫນ້າ ໑໔໕-໑໔໖.

ທາງໜ້າ. ແຕ່ສຳລັບ ເຮເກນ ແລ້ວ ປະຫວັດສາດຂອງທົ່ວໂລກເປັນຄືການ ຂະຫຍາຍຕົວຂອງຄວາມຄິດ, ຂອງ "ແນວຄິດເດັດຖານ".

ໃນບົດນີພົນຂອງບັນດານັກປະຕິວັດປະຊາທິປະໄຕ, ນັກວັດຖຸນິຍົມຊາວລັດ ເຊຍສະໄໝສະຕະວັດທີ ໑໙ ເຊັ່ນ ແຮກເຊນ, ເບລິນສະກີ, ໂດໂບຣລິວບົຟ ເຊີກນີເຊບສະກີ ນັ້ນມີສ່ວນປະກອບທີ່ສຳຄັນຂອງການອະທິບາຍແບບວັດຖຸນິຍົມ ແລະ ທັດສະນະແບບສັດຈະວິພາກ ກ່ຽວກັບຄວາມຮັບຮູ້ຊີວິດຂອງສັງຄົມ.

ແຕ່ສັງຄົມສາດກ່ອນສະໄໝລັດທິມາກ ບໍ່ໄດ້ເປັນວິທະຍາສາດແທ້ຈິງກ່ຽວ ກັບສັງຄົມ. ໃນບົດ "ກ.ມາກ" ວ.ອີ.ເລນິນ ໄດ້ໄຈ້ແຍກຈຸດບົກພ່ອງ ພື້ນ ຖານຂອງສັງຄົມສາດ ໃນສະໄໝນັ້ນດັ່ງຕໍ່ໄປນີ້: ບັນດານັກສັງຄົມສາດ ສະ ໄໝກ່ອນມາກ ໄດ້ຄົ້ນຄວ້າພຽງແຕ່ຕົ້ນເຫດທາງດ້ານແນວຄິດຂອງການເຄື່ອນ ໄຫວທາງປະຫວັດສາດຂອງຄົນ ໂດຍບໍ່ໄດ້ຊີ້ແຈງເຖິງລັກສະນະທີ່ການພົວ ພັນ ທາງສັງຄົມອັນກັບການຂະຫຍາຍຕົວຂອງການຜະລິດວັດຖຸ; ພວກເຂົາເຈົ້າໄດ້ ນຳເອົາຂະບວນວິວັດແຫ່ງປະຫວັດສາດເຂົ້າໃນຂອບເຂດການເຄື່ອນໄຫວຂອງ ບັນດາ ບຸກຄົນຜູ້ຍິ່ງໃຫຍ່, ຖືເບົາບົດບາດຕັດສິນຂອງມວນຊົນ ໃນການ ຂະ ຫຍາຍຕົວຂອງສັງຄົມນັ້ນ.

ສາຍເຫດທີ່ພາໃຫ້ທັດສະນະກ່ຽວກັບປະຫວັດສາດແບບຈິດຕະນິຍົມ ໄດ້ກຳ ເນີດອັນ ແລະ ມີຖານະຄອບຄອງໃນໄລຍະຍາວນານນັ້ນມີດັ່ງຕໍ່ໄປນີ້:

ຂໍ້ທີໜຶ່ງ, ບັນດານັກສັງຄົມສະໄໝກ່ອນມາກ ຖືວ່າຈິດສຳນຶກແມ່ນ ຕົ້ນ ເຫດຂອງທຸກໆເຫດການປະຫວັດສາດ. ຈາກນັ້ນ ພວກເຂົາເຈົ້າໄດ້ຖອດຖອນ ເອົາຂໍ້ສະຫລຸບອີກຂໍ້ໜຶ່ງອອກມາ ຄືໜ້າທີ່ຕົ້ນຕໍໃນການພັດທະນາສັງຄົມ ນັ້ນ ແມ່ນການປ່ຽນແປງແນວຄິດ, ການເມືອງ, ປັບປຸງລູນສິນບັດໃຫ້ສົມບູນອັນ , ເສີມຂະຫຍາຍຮູບແບບອື່ນໆ ຂອງສະຕິສັງຄົມ. ລັດທິມາກ ໄດ້ພິສູດວ່າ ແນວ ຄິດ ແລະ ລູນສິນບັດໃນທີ່ສຸດແລ້ວ ແມ່ນການສ່ອງແສງເຖິງການດຳລົງຄົງຕົວ ຂອງສັງຄົມ, ແລະ ກ່ອນອື່ນໝົດ ແມ່ນການສ່ອງແສງເຖິງວິທີການຜະລິດຊັບ ສິນວັດຖຸ; ຂໍ້ທີສອງ ພ້ອມກັນກັບການແຍກການອອກແຮງງານທາງມັນສະ - ໝອງອອກຈາກການອອກແຮງງານທາງຮ່າງກາຍແລ້ວ, ການອອກແຮງງານ ທາງມັນສະໝອງ ກາຍເປັນອະພິສິດຂອງບັນດາຊົນຊັ້ນປົກຄອງ. ເກີດ ມີ ຄວາມໄຝ່ຝັນກ່ຽວກັບຄວາມເປັນເອກະລາດແບບເດັດຖານຂອງຊີວິດດ້ານ ຈິດ

ໃຈຂອງສັງຄົມ. ອັນນີ້ໄດ້ປົກປິດເລື່ອງທີ່ວ່າ ຜົນປະໂຫຍດທາງຊົນຊັ້ນຂອງບັນດາຊົນຊັ້ນນາຍທຶນ ທີ່ປົກຄອງນັ້ນ ໄດ້ກໍານົດແນວຄິດຂອງຊົນຊັ້ນດັ່ງກ່າວ ແລະ ອໍານວຍໃຫ້ຍໍ້ຍອງແນວຄິດດັ່ງກ່າວ ເປັນສິ່ງຍອດຍິ່ງຂອງມວນມະນຸດທັງຫມົດ. ຂໍ້ທີສາມ, ບັນດານັກແນວຄິດຂອງຊົນຊັ້ນທີ່ປົກຄອງໄດ້ຫມູນໃຊ້ຄວາມ ເຂົ້າໃຈແບບຈິດຕະນິຍົມກ່ຽວກັບປະຫວັດສາດ ສໍາລັບສ້າງພື້ນຖານເພື່ອປະຕິເສດ ພຶດຕິກໍາປະຕິວັດຕົວຈິງ ໃນຖານະເປັນພາຫະນະເພື່ອແກ້ໄຂຄວາມຂັດແຍ່ງ ດ້ານຊີວິດສັງຄົມໃນສັງຄົມທີ່ມີຊົນຊັ້ນ.

ໃນການຄົ້ນຄວ້າຊີວິດສັງຄົມ ສັງຄົມສາດນາຍທຶນສະໄຫມໃຫມ່ ກໍ່ຢືນຢູ່ໃນທັດສະນະລັດທິຈິດຕະນິຍົມເຊັ່ນດຽວກັນ. ອັນນີ້ມັນສະແດງອອກໃນການປະຕິເສດກົດເກນພາວະວິໄສແຫ່ງການຂະຫຍາຍຕົວດ້ານສັງຄົມ, ໃນຄວາມພະຍາຍາມຢາກຈໍາກັດການຄົ້ນຄວ້າການຂະຫຍາຍຕົວດ້ານສັງຄົມ ດ້ວຍຂອບເຂດ ຈິດຕະສາດຂອງບຸກຄົນ, ດ້ວຍການກະທໍາຂອງບັນດາກຸ່ມຄົນ, ຍ້ອນການພົວພັນລະຫວ່າງ ກຸ່ມຄົນເຫລົ່ານີ້.

ກ.ມາກ ແລະ ຟ.ອັງແກນ ໄດ້ດັດແປງຢ່າງເຖິງ ກົກເຖິງຮາກ ແລະ ຢ່າງມີການຕໍາຫນິວິຈານ, ໄດ້ ຫມູນໃຊ້ທຸກສິ່ງທີ່ມີຄຸນຄ່າ ຈາກທິດສະດີ ກ່ຽວກັບສັງຄົມສາດໃນສະໄຫມອະດີດ. ການສ້າງຕັ້ງລັດທິວັດຖຸນິຍົມປະຫວັດວິພາກແມ່ນການຫັນປ່ຽນແບບປະຕິວັດໃນທັດສະນະກ່ຽວກັບສັງຄົມ.

ລັດທິວັດຖຸນິຍົມປະຫວັດວິພາກ ນອນຢູ່ໃນຄວາມເປັນເອກະພາບແບບກາຍອິນຊີກັບລັດທິວັດຖຸນິຍົມສັດຈະວິພາກ. ມັນແມ່ນພາກສ່ວນທີ່ຕັດຂາດອອກຈາກກັນບໍ່ໄດ້ຂອງປັດຊະຍາ ມາກ-ເລນິນ ແລະ ພ້ອມກັນນັ້ນ ກໍ່ມີລັກສະນະເອກະລາດແບບຫຽບຖານ. ຄວາມເປັນເອກະພາບລະຫວ່າງລັດທິວັດຖຸນິຍົມສັດຈະວິພາກ ແລະ ປະຫວັດວິພາກນັ້ນ ສະແດງອອກຢູ່ບ່ອນວ່າ ລັດທິວັດຖຸນິຍົມ ປະຫວັດວິພາກ ແມ່ນການຫມູນໃຊ້ຫລັກການ ແລະ ກົດເກນຂອງລັດທິວັດຖຸນິຍົມສັດຈະວິພາກເຂົ້າໃນການຂະຫຍາຍຕົວຂອງສັງຄົມ. ທໍາມະຊາດລວມ ຂອງໂລກ ທີ່ເປັນວັດຖຸ, ເຊິ່ງຄົນ ແລະ ສັງຄົມປະກອບເປັນພາກສ່ວນຫນຶ່ງ ຂອງໂລກນັ້ນ ໄດ້ກໍານົດຄວາມເປັນເອກະພາບ ລະຫວ່າງລັດທິວັດຖຸນິຍົມສັດຈະວິພາກ ແລະ ປະຫວັດວິພາກ. ການພົວພັນເຊິ່ງກັນ ແລະ ກັນລະຫວ່າງ ພວກມັນມີລັກສະນະສອງດ້ານ. ປັດຊະຍາມາກ-ເລນິນ ຍັງບໍ່ທັນແມ່ນວິທະຍາສາດທີ່

ສົມບູນ ແລະ ຫນັກແຫນ້ນເທື່ອ, ຖ້າຫາກບໍ່ໄດ້ໄຈ້ແຍກທາດແທ້ວັດຖຸນິຍົມ-ສັດຈະວິພາກແຫ່ງການກຳເນີດ ແລະ ຂະຫຍາຍຕົວຂອງສັງຄົມ. ການແກ້ໄຂບັນຫາພື້ນຖານຂອງປັດຊະຍາຢ່າງມີວິທະຍາສາດບໍ່ອາດຈະເປັນໄປໄດ້ໂດຍປາສະຈາກການໄຈ້ແຍກບັນຫາ ເຊັ່ນ ຈິດສຳນຶກ ເກີດຂຶ້ນມາຢ່າງໃດ, ເງື່ອນ ໄຂປະຫວັດສາດທີ່ພາໃຫ້ຈິດສຳນຶກເກີດຂຶ້ນມານັ້ນ ເປັນແນວໃດ, ພຶດຕິກຳຕົວຈິງທາງສັງຄົມ ມີຂີດຂາດຫຍັງແດ່ ຕໍ່ຂະບວນວິວັດແຫ່ງຄວາມຮັບຮູ້. ດ້ວຍເຫດ-ນັ້ນ ຈະຕັດແບ່ງລັດທິວັດຖຸນິຍົມປະຫວັດວິພາກອອກສະເພາະ, ຫລື ຈະພະຍາຍາມເຊື່ອມມັນເຂົ້ານຳສັດຈະວິພາກ ລ້ວນແຕ່ແມ່ນເລື່ອງທີ່ເຮັດບໍ່ໄດ້ທັງນັ້ນ.

## ໔. ກົດເກນ ແລະ ມາດຕະເກນຂອງ ລັດທິວັດຖຸນິຍົມ ປະຫວັດວິພາກ

ບັນດາວິທະຍາສາດສັງຄົມເຊັ່ນ ປະຫວັດສາດ, ເສດຖະສາດການເມືອງ, ທິດສະດີກ່ຽວກັບລັດ ແລະ ກົດຫມາຍ, ກ່ຽວກັບຈັນຍາ, ສິລະປະທັດ, ພາສາສາດ ແລະ ອື່ນໆນັ້ນຄົ້ນຄວ້າບາງດ້ານຫລືບາງປະກົດການຂອງຊີວິດສັງຄົມ . ລັດທິວັດຖຸນິຍົມສັດຈະວິພາກ ໃນຖານະເປັນພາກສ່ວນຫນຶ່ງຂອງປັດຊະຍາມາກ-ເລນິນ ມີເປົ້າຫມາຍ, ກົດເກນ ແລະ ມາດຕະເກນ, ສິ່ງທີ່ໄດ້ສະແດງເຖິງຈຸດພິເສດຂອງມັນ ຄືວິທະຍາສາດດ້ານສັງຄົມສາດ ແລະ ປັດຊະຍາກ່ຽວ ກັບສັງຄົມ.

ລັດທິວັດຖຸນິຍົມປະຫວັດວິພາກ ແມ່ນວິທະຍາສາດກ່ຽວກັບກົດເກນລວມ ທີ່ສຸດແຫ່ງການຂະຫຍາຍຕົວ ແລະ ການປະຕິບັດງານຂອງສັງຄົມ, ກ່ຽວ ກັບໂຄງປະກອບ ແລະ ກຳລັງຊຸກດັນຂອງມັນ.

ໃນສັງຄົມ ມີກົດເກນໃດແດ່ ແລະ ກຳລັງຊຸກດັນການຂະຫຍາຍຕົວ ຂອງສັງຄົມນັ້ນ ເປັນຄືແນວໃດ. ກົດເກນແຫ່ງການຂະຫຍາຍຕົວທາງປະຫວັດສາດນັ້ນ ແບ່ງອອກເປັນກົດເກນລວມ ແລະ ກົດເກນສະເພາະ. ກົດເກນລວມ ມີຜົນບັງຄັບໃຊ້ໃນຕະຫລອດໄລຍະປະຫວັດສາດ. ກົດເກນດັ່ງກ່າວຊີ້ແຈງ ໃຫ້ເຫັນອັນເປັນທາດແທ້ ແລະ ສຳຄັນກວ່າຫມູ່ ທີ່ມີໃນທຸກໆຮູບຖານຈັດຕັ້ງ ສັງ

ຄົນ, ໃຫ້ເຫັນລັກສະນະຂະບວນວິວັດແຫ່ງປະຫວັດສາດເວົ້າລວມ. ຕົວ ຢ່າງ ໃນຈຳນວນກົດເກນດັ່ງກ່າວ ມີກົດເກນກ່ຽວກັບບົດບາດຕັດສິນຊີ້ຂາດຂອງການ ດຳລົງຄົງຕົວຂອງສັງຄົມ ທີ່ມີຕໍ່ສະຕິສັງຄົມ, ກົດເກນກ່ຽວກັບບົດບາດຕັດສິນຊີ້ ຂາດຂອງແບບວິທີການຜະລິດທີ່ມີຕໍ່ທຸກໆຂົງເຂດອື່ນໃນຊີວິດສັງຄົມແລະອື່ນ ໆ. ກົດເກນສະເພາະມີຜົນບັງຄັບໃຊ້ໃນຂອບເຂດຮູບຖານຈັດຕັ້ງສັງຄົມເສດຖະກິດ ໜຶ່ງ ຫລືຈຳນວນໜຶ່ງ, ໄຈ້ແຍກທາດແທ້, ລັກສະນະພິເສດຂອງຮູບຖານດັ່ງ ກ່າວ. ເຊັ່ນຕົວຢ່າງ ກົດເກນຂະຫຍາຍຕົວແບບບໍ່ສະໝ່ຳສະເໝີທາງ ດ້ານ ເສດຖະກິດ ແລະ ການເມືອງນັ້ນ ມີຜົນບັງຄັບໃຊ້ໃນເງື່ອນໄຂທຶນນິຍົມ. ກົດ ເກນຂະຫຍາຍຕົວແບບມີແຜນການ ແລະ ສົມສ່ວນ, ການປະຕິບັດ ການແຈກ ຢາຍຕາມປະລິມານ ແລະ ຄຸນນະພາບຂອງແຮງງານ ແລະ ອື່ນໆນັ້ນ ມີຜົນ ບັງຄັບໃຊ້ໃນສັງຄົມສັງຄົມນິຍົມ. ໃນທຸກໆຮູບຖານຈັດຕັ້ງທີ່ມີລັກສະນະປໍລະປັກ ກັນນັ້ນລ້ວນແຕ່ມີກົດເກນວ່າດ້ວຍການຕໍ່ສູ້ຊົນຊັ້ນໃນຖານະເປັນກຳລັງຊຸກດັນ - ການຂະຫຍາຍຕົວຂອງສັງຄົມ.

ກຳລັງຊຸກດັນ ການຂະຫຍາຍຕົວຂອງສັງຄົມ ແມ່ນສາຍເຫດທີ່ເລິກ ເຊິ່ງ ກວ່າໝູ່ແລະ ມີຄຸນປະໂຫຍດໃນໄລຍະຍາວນານ. ກຳລັງດັ່ງກ່າວໄດ້ຊຸກດັນ- ການເຄື່ອນເໜັງຂອງຄົນຈຳນວນຫລວງຫລາຍ, ຮັບປະກັນການຂະຫຍາຍຕົວ ຂອງສັງຄົມໃຫ້ ເດີນໄປຕາມເສັ້ນທາງແຫ່ງຄວາມກ້າວໜ້າ. ລະບົບ ກຳ ລັງຊຸກດັນການຂະຫຍາຍຕົວຂອງສັງຄົມ ປະກອບດ້ວຍ: ຄວາມຂັດແຍ່ງ ທາງ ສັງຄົມ ທີ່ເປັນສາຍເຫດທີ່ສຳຄັນຂອງການປ່ຽນແປງທາງສັງຄົມ, ການເຄື່ອນ ໄຫວທີ່ກ້າວໜ້າຂອງຄົນ, ການຕໍ່ສູ້ປະຕິວັດຂອງປະຊາຊົນ ເພື່ອການປົດປ່ອຍ ຊາດ, ຄວາມຮຽກຮ້ອງຕ້ອງການ, ຜົນປະໂຫຍດ, ຈຸດປະສົງ, ເຫດຜົນດ້ານ ແນວຄິດ.

ບັນດາຜູ້ສ້າງພື້ນຖານລັດທິມາກ-ເລນິນ ໄດ້ສ້າງພື້ນຖານຄວາມເຂົ້າ ໃຈ ກ່ຽວກັບໂລກແບບວັດຖຸນິຍົມ ແລະ ມີວິທະຍາສາດຢ່າງແທ້ຈິງ, ທາດແທ້ຂອງ ຄວາມເຂົ້າໃຈດັ່ງກ່າວນີ້ແມ່ນ: ການແກ້ໄຂບັນຫາພື້ນຖານຂອງປັດຊະຍາແບບ ລັດທິວັດຖຸນິຍົມຢ່າງສອດຄ່ອງກັບສັງຄົມ, ກົດເກນກ່ຽວກັບບົດບາດຕັດສິນ ຊີ້ ຂາດຂອງການດຳລົງຄົງຕົວສັງຄົມ ທີ່ມີຕໍ່ສະຕິສັງຄົມ; ກົດເກນກ່ຽວກັບ ບົດ ບາດຕັດສິນຊີ້ຂາດຂອງວິທີການຜະລິດທີ່ມີຕໍ່ທຸກໆຂົງເຂດອື່ນໃນຊີວິດສັງຄົມ, ທິດ

ສະຕິກ່ຽວກັບກຳລັງຊຸກດັນການຂະຫຍາຍຕົວ ຂອງສັງຄົມ; ກ່ຽວກັບບົດ ບາດ ຕັດສິນຊີ້ຂາດຂອງມະຫາຊົນ ໃນປະຫວັດສາດ; ກ່ຽວກັບການພົວພັນກັນ ລະຫວ່າງເງື່ອນໄຂພາວະວິໄສ ແລະ ປັດໄຈອັດຕະວິໄສໃນຂະບວນວິວັດແຫ່ງປະຫວັດສາດ.

ຂໍ້ວິນິດໄສເບື້ອງຕົ້ນຂອງລັດທິວັດຖຸນິຍົມປະຫວັດວິພາກແມ່ນ: ການດຳລົງຄົງຕົວສັງຄົມ ຕັດສິນສະຕິສັງຄົມ. ການດຳລົງຄົງຕົວສັງຄົມ ແມ່ນຊີວິດ ດ້ານວັດຖຸຂອງສັງຄົມ, ກ່ອນອື່ນຫມົດແມ່ນວິທີການຜະລິດຊັບສິນວັດຖຸ ແລະ ແມ່ນການພົວພັນລະຫວ່າງຄົນໃນຂະບວນວິວັດ ແຫ່ງການຜະລິດ. ສະຕິສັງຄົມແມ່ນຜົນບວກຂອງບັນດາແນວຄິດ, ທິດສະດີ, ທັດສະນະ, ຄວາມຮູ້ສຶກ, ອາລົມ, ຄວາມຊິນເຄີຍ ແລະ ມູນເຊື້ອ, ເຊິ່ງໃນນັ້ນ ໄດ້ສ່ອງແສງເຖິງທຳມະຊາດ ແລະ ຊີວິດທາງດ້ານວັດຖຸຂອງສັງຄົມ.

ບັນຫາກ່ຽວກັບການພົວພັນກັນລະຫວ່າງການດຳລົງຄົງຕົວສັງຄົມ ແລະສະຕິສັງຄົມນັ້ນ ໄດ້ສະແດງອອກຢູ່ໃນບັນຫາພື້ນຖານຂອງປັດຊະຍາຢ່າງສອດຄ່ອງກັບຊີວິດສັງຄົມ. ຜູ້ສ້າງຕັ້ງລັດທິມາກ ໄດ້ວາງພື້ນຖານກົດເກນວ່າດ້ວຍ ບົດບາດນຳຫນ້າຂອງການຜະລິດວັດຖຸໃນຊີວິດຂອງສັງຄົມ. ລັດທິມາກ ໄດ້ພິ ສູດແລ້ວວ່າ ກ່ອນທີ່ຄົນຈະຄົ້ນຄວ້າວິທະຍາສາດ, ການເມືອງ, ສາສະຫນາ, ສິລະປະ, ຕ້ອງກິນ, ດື່ມ, ມີເຮືອນຢູ່, ມີເຄື່ອງນຸ່ງ, ຫມາຍຄວາມວ່າ ຕ້ອງຕອບສະຫນອງຄວາມຕ້ອງການຂອງຕົນ. ການເສີມຂະຫຍາຍການ ຜະລິດວັດຖຸນັ້ນ ແມ່ນພາຫະນະພື້ນຖານສຳລັບແກ້ໄຂບັນຫາດັ່ງກ່າວ.

ບົນພື້ນຖານການແກ້ໄຂບັນຫາກ່ຽວກັບການພົວພັນກັນລະຫວ່າງການດຳລົງຄົງຕົວສັງຄົມ ແລະ ສະຕິສັງຄົມແບບລັດທິວັດຖຸນິຍົມສັດຈະວິພາກ, ລັດທິມາກໄດ້ວິໄຈຢ່າງມີວິທະຍາສາດທົ່ວທັງລະບົບການພົວພັນທາງສັງຄົມ ທີ່ແບ່ງ ອອກເປັນສອງຈຸດື: ວັດຖຸ ແລະ ແນວຄິດ. ພື້ນຖານຂອງການພົວພັນດ້ານວັດຖຸ - (ໂຄງລ່າງ) ນັ້ນແມ່ນການພົວພັນແຫ່ງການຜະລິດລະຫວ່າງຄົນ ທີ່ເກີດມີຂຶ້ນມາໂດຍບໍ່ຂຶ້ນກັບມານະຈິດ ແລະ ຈິດສຳນຶກຂອງພວກເຂົາເຈົ້າ. ການພົວພັນດ້ານແນວຄິດ (ດ້ານການເມືອງ, ກົດຫມາຍ, ຄຸນສົມບັດ, ສາສະຫນາແລະອື່ນ ໆ) ເປັນແຕ່ພຽງໂຄງບົນທີ່ຢູ່ເຫນືອການພົວພັນດ້ານວັດຖຸເທົ່ານັ້ນ.

ມາກ ແລະ ອັງແກນ ໄດ້ສ້າງຕັ້ງທິດສະດີວ່າດ້ວຍຮູບຖານຈັດຕັ້ງສັງຄົມ

-ເສດຖະກິດ ຄືເປັນສັງຄົມ ທີ່ຢູ່ໃນລະດັບອັນແນ່ນອນ ແຫ່ງການຂະຫຍາຍຕົວທາງປະຫວັດສາດ ແລະ ມີວິທີການຜະລິດອັນແນ່ນອນ, ມີພື້ນຖານດ້ານ ເສດຖະກິດ ແລະ ໂຄງບົນ, ມີລະດັບການຂະຫຍາຍຕົວດ້ານຊີວິດທາງຈິດໃຈ, ມີແບບແຜນດຳລົງຊີວິດ, ມີການພົວພັນລະຫວ່າງປະຊາຊາດ ແລະ ລະຫວ່າງ-ຄອບຄົວ. ແຕ່ເວລານັ້ນເປັນຕົ້ນມາ ການຂະຫຍາຍຕົວທາງປະຫວັດສາດເປັນຄືຂະບວນວິວັດແບບມີກົດເກນວິທະຍາສາດ ແລະ ທຳມະຊາດ ໃນການ ປ່ຽນແທນຮູບຖານຈັດຕັ້ງສັງຄົມ-ເສດຖະກິດໜຶ່ງ ດ້ວຍຮູບຖານຈັດຕັ້ງອີກແບບໜຶ່ງທີ່ສົມບູນກວ່າເກົ່າ.

ໃນຍຸກສະໄໝປະຈຸບັນນີ້ ຂະບວນວິວັດແຫ່ງການຂ້າມຜ່ານຈາກທຶນນິຍົມ-ກ້າວຂຶ້ນສູ່ສັງຄົມນິຍົມຢ່າງຫລີກລ່ຽງບໍ່ໄດ້ທາງປະຫວັດສາດນັ້ນ ພວມ ດຳເນີນໄປໃນຂອບເຂດທົ່ວໂລກ. ດັ່ງເມື່ອວັນທີ ໒ ທັນວາ ປີ ໑໙໗໕ ປະຊາຊົນ -ລາວ ພາຍໃຕ້ການນຳພາຂອງພັກ ລັດທິມາກ-ເລນິນ ຄືພັກປະຊາຊົນປະຕິວັດໄດ້ສຳເລັດການປະຕິວັດຊາດ-ປະຊາທິປະໄຕຢ່າງມີໄຊ. ການຕໍ່ສູ້ປະຕິ ວັດຂອງປະຊາຊົນລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່ ຄືໄລຍະແຫ່ງການປະຕິວັດສັງຄົມນິຍົມ, ກໍ່ສ້າງສັງຄົມໃໝ່. ອັນນີ້ແມ່ນການສະແດງຕົວອອກຢ່າງໃສ ແຈ້ງເຖິງລັກສະນະກ້າວເດີນໄປໜ້າ ຂອງຂະບວນວິວັດແຫ່ງປະຫວັດສາດ ຄືການຂ້າມຜ່ານຈາກຮູບຖານຈັດຕັ້ງແບບເກົ່າ ກ້າວຂຶ້ນສູ່ຮູບຖານຈັດຕັ້ງທີ່ກ້າວ ໜ້າແລະ ນຳໜ້າກວ່າ.

ເປັນເທື່ອທຳອິດ ທີ່ລັດທິວັດຖຸນິຍົມປະຫວັດວິພາກ ໄດ້ແກ້ໄຂຢ່າງມີ ວິທະຍາສາດ ບັນຫາກ່ຽວກັບການພົວພັນກັນລະຫວ່າງເງື່ອນໄຂພາວະວິໄສ ແລະ-ປັດໄຈອັດຕະວິໄສໃນການຂະຫຍາຍຕົວຂອງສັງຄົມ. ບັນດາເງື່ອນໄຂພາວະວິໄສ ແມ່ນເງື່ອນໄຂທີ່ບໍ່ຂຶ້ນກັບມານະຈິດ ແລະ ຈິດສຳນຶກຂອງຄົນ, ເງື່ອນໄຂດັ່ງກ່າວນີ້ ກຳນົດທິດທາງ, ຂອບເຂດຂອງການເຄື່ອນໄຫວຂອງພວກ ເຂົາເຈົ້າ (ເຊັ່ນຕົວຢ່າງ, ເງື່ອນໄຂທຳມະຊາດ, ລະດັບການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດທີ່ບັນລຸມາໄດ້, ຄວາມຕ້ອງການການຂະຫຍາຍຕົວຂອງສັງຄົມທີ່ສຸກງອມໃນທາງປະຫວັດສາດ ແລະ ອື່ນໆ ). ປັດໄຈອັດຕະວິໄສ -ແມ່ນການເຄື່ອນໄຫວແບບມີສະຕິຂອງມະຫາຊົນ, ຊົນຊັ້ນ, ພັກ, ລັດ ແລະບາງບຸກຄົນ (ຈິດສຳນຶກ, ມານະຈິດ, ຄວາມຊຳນານໃນການກະທຳ ແລະ

ອື່ນ ໆ).

ໃນການເຄື່ອນໄຫວຂອງຕົນ ຄົນຈຳຕ້ອງຄຳນຶງເຖິງບັນດາເງື່ອນໄຂ ພາວະວິໄສ. ພຽງແຕ່ການຄຳນຶງເຖິງເງື່ອນໄຂດັ່ງກ່າວນີ້ ໃນຂອບເຂດກາລະ-ເວລາທີ່ແນ່ນອນເທົ່ານັ້ນ ຈຶ່ງອຳນວຍໃຫ້ແກ້ໄຂບັນດາໜ້າທີ່ດ້ານເສດຖະກິດ, ການເມືອງ ແລະ ແນວຄິດທີ່ສຸກງອມແລ້ວຢ່າງໄດ້ຮັບຜົນດີ. ການເຄື່ອນໄຫວຂອງຄົນດຳເນີນໄປໃນເງື່ອນໄຂພາວະວິໄສ ແລະ ໃນສຸດທ້າຍ ຖືກກຳນົດ - ດ້ວຍເງື່ອນໄຂດັ່ງກ່າວ ທີ່ເປັນພຽງແຕ່ ປະຖົມປັດໄຈອັນຈຳເປັນ, ເງື່ອນ-ໄຂພາວະວິໄສ ສ້າງຄວາມອາດສາມາດໃນການດຳເນີນພຶດຕິກຳປະຫວັດສາດນີ້ ຫລືພຶດ ຕິກຳປະຫວັດສາດນັ້ນ. ການ ຜັນປ່ຽນຄວາມອາດເປັນໄປໄດ້ ມາເປັນຄວາມເປັນຈິງນັ້ນ ກ່ອນອື່ນໝົດແມ່ນຂຶ້ນກັບປັດໄຈອັດຕະວິໄສເປັນ ສ່ວນຫລາຍ ເຊັ່ນ ການເຄື່ອນໄຫວແບບປະດິດສ້າງທີ່ມີສະຕິຂອງບັນດາຊົນຊັ້ນປະຕິວັດ, ສະຕິການຈັດຕັ້ງ, ລັກສະນະຕັ້ງໜ້າ, ມານະຈິດ ແລະ ກຳລັງແຮງຂອງພວກເຂົາເຈົ້າ. ການທີ່ລັດທິມາກ-ເລນິນ ໄດ້ແກ້ໄຂບັນຫາ ກ່ຽວ ກັບການພົວພັນກັນລະຫວ່າງເງື່ອນໄຂພາວະວິໄສ ແລະ ປັດໄຈອັດຕະວິໄສຢ່າງມີວິທະຍາສາດນັ້ນ ໄດ້ເປັນອຳກະແຈໃຫ້ແກ່ ວ.ອີ.ເລນິນ ໃນການໄຈ້ແຍກຢ່າງຮອບດ້ານ ທິດສະດີວ່າດ້ວຍການປະຕິວັດສັງຄົມນິຍົມ, ວ່າດ້ວຍບົດບາດນຳພາຂອງຊົນຊັ້ນກຳມະກອນ ແລະ ພັກລັດທິມາກ ໃນການຕໍ່ສູ້ເພື່ອກໍ່ສ້າງສັງຄົມນິ-ຍົມ ແລະ ກອມມູນິດນິຍົມ.

ຄວາມເຂົ້າໃຈແບບລັດທິມາກ-ເລນິນ ກ່ຽວກັບການພົວພັນກັນແບບສັດຈະວິພາກລະຫວ່າງບັນດາເງື່ອນໄຂພາວະວິໄສ ແລະ ປັດໄຈອັດຕະວິໄສໃນ ປະຫວັດສາດນັ້ນ ແນໃສ່ເພື່ອຕ້ານລັດທິມານະຈິດນິຍົມ, ກໍຄືຕ້ານລັດທິຊາຕາກຳນິຍົມ. ການເຮັດໃຫ້ບົດບາດຂອງຈິດສຳນຶກ ແລະ ຂອງມານະຈິດຂອງຄົນ - ( ຂອງບັນດາພັກການເມືອງ ແລະ ບາງບຸກຄົນ ) ເປັນລັກສະນະເດັດຖານ, ການບໍ່ເອົາຫົວຊາກົດເກນ ແລະ ເງື່ອນໄຂພາວະວິໄສນັ້ນ ນຳໄປເຖິງ ລັດທິມານະຈິດນິຍົມ ແລະ ລັດທິສ່ຽງໄພທາງການເມືອງ. ການເຊື່ອຖືງົມງວາຍ-ກົດເກນ ແລະ ເງື່ອນໄຂພາວະວິໄສ, ການຫຼຸດເບົາບົດບາດຂອງການ ເຄື່ອນໄຫວແບບມີສະຕິຂອງຄົນນັ້ນ ໄດ້ນຳໄປສູ່ລັດທິຊາຕາກຳນິຍົມ ແລະ ໄປສູ່ການຍອມຈຳນົນຕໍ່ລັກສະນະເກີດຂຶ້ນເອງ.

ລັດທິມາກ ໄດ້ສ້າງພື້ນຖານໃຫ້ແກ່ບັນຫາການພົວພັນເຊິ່ງກັນ ແລະ ກັນ-ລະຫວ່າງກິດເກນທາງປະຫວັດສາດ ແລະ ການເຄື່ອນໄຫວແບບມີສະຕິ ຂອງຄົນນັ້ນຢ່າງຮອບດ້ານ. ກ.ມາກ ແລະ ຟ.ອັງແກນ ໄດ້ຂຽນວ່າ: "ປະຫວັດສາດບໍ່ແມ່ນສິ່ງອື່ນໃດ, ມັນແມ່ນການເຄື່ອນໄຫວຂອງຄົນເພື່ອບັນລຸຈຸດປະສົງ-ຂອງຕົນ" ໑). ໃນປະຫວັດສາດບໍ່ມີຫຍັງທີ່ດຳເນີນໄປໂດຍປາສະຈາກ ເຈດຕະນາທີ່ມີສະຕິແລະມີຈຸດປະສົງ, ກິດເກນທາງປະຫວັດສາດແລະການເຄື່ອນໄຫວແບບມີສະ ຕິຂອງຄົນ, ສັດຈະວິພາກຂອງການພົວພັນກັນ ລະຫວ່າງ ກິດເກນ ແລະ ການເຄື່ອນໄຫວດັ່ງກ່າວນີ້ ໄດ້ໄຈ້ແຍກຢ່າງຖືກຖ້ວນບັນດາມາດຕະເກນຂອງລັດທິວັດຖຸນິຍົມປະຫວັດວິພາກເຊັ່ນ ຄວາມຈຳເປັນ ແລະ ອິດສະຫຼະພາບ.

ຄວາມຈຳເປັນ ໃນທຳມະຊາດ ແລະ ສັງຄົມ ຄືງຢູ່ໃນຮູບແບບຂອງ ກິດເກນພາວະວິໄສ ທີ່ບໍ່ຂຶ້ນກັບຈິດສຳນຶກຂອງຄົນ. ມັນໄຂທາງໃຫ້ຕົນເອງ ໂດຍຜ່ານການບັງເອີນຫລາຍປະການ, ເຊິ່ງລັດທິວັດຖຸນິຍົມ ສັດຈະວິພາກຖືເປັນຄືການເພີ່ມເຕີມ ແລະ ເປັນຄືຮູບແບບປະກົດຕົວຂອງຄວາມຈຳເປັນ.

ທິດສະດີມາກ-ເລນິນ ວ່າດ້ວຍກິດເກນພາວະວິໄສ ແລະ ຄວາມຈຳເປັນໃນປະຫວັດສາດ ບໍ່ໝາຍເຖິງການປະຕິເສດອິດສະຫລະພາບທີ່ແນ່ນອນ, ຫືວຄິດປະດິດສ້າງ ແລະ ການເຄື່ອນໄຫວທີ່ມີສະ ຕິຂອງຄົນ. ອິດສະຫລະພາບ-ແມ່ນການເຄື່ອນໄຫວດັດສ້າງຂອງຄົນ ບົນພື້ນຖານຄວາມຈຳເປັນທີ່ຮັບຮູ້ແລ້ວ. ເງື່ອນໄຂທີ່ໜຶ່ງຂອງອິດສະຫລະພາບນັ້ນ ແມ່ນຄວາມຮັບຮູ້ບັນດາກິດເກນ ພາວະວິໄສແຫ່ງການຂະຫຍາຍຕົວ ຂອງທຳມະຊາດ ແລະ ສັງຄົມ. ບໍ່ມີ ຄວາມຮູ້ແລ້ວກໍບໍ່ມີອິດສະຫລະພາບ. ອັງແກນ ໄດ້ຂຽນວ່າ: "ດັ່ງນັ້ນ ອິດສະຫລະ-ຂອງມານະຈິດ ບໍ່ແມ່ນສິ່ງອື່ນໃດ, ມັນແມ່ນຄວາມສາມາດໃນການຕັດສິນ ບັນຫາວຽກງານຢ່າງມີຄວາມຮອບຄອບ "໒ ). ດັ່ງນັ້ນມີແຕ່ຄວາມຮູ້ກ່ຽວກັບ ກິດເກນພາວະວິໄສແຫ່ງການຂະຫຍາຍຕົວຂອງທຳມະຊາດ ແລະສັງຄົມເທົ່ານັ້ນທີ່ອຳນວຍຄວາມສະດວກໃຫ້ ຄົນກຳນົດທີ່ຕັ້ງບົດບາດຂອງ ຕົນໃນໂລກ, ຊອກ

---

໑) ກ.ມາກ ແລະ ຟ.ອັງແກນ ບົດນິພົນ, ເຫລັ້ມທີ ໒, ໜ້າ ໑໐໒.

໒) ກ.ມາກ ແລະ ຟ.ອັງແກນ ບົດນິພົນ, ເຫລັ້ມທີ ໒໐, ໜ້າ ໑໑໖.

ທາງການຕັດສິນບັນຫາທີ່ຖືກຕ້ອງ ແລະ ກຳນົດຈຸດໝາຍ ແລະ ຊຸດົມຄະຕິຂອງຄົນ.

ການຮັບຮູ້ຄວາມຈຳເປັນນັ້ນ ແມ່ນໜຶ່ງໃນຈຳນວນເງື່ອນ ໄຂທີ່ຕັດສິນ ຊີ້ຂາດ, ແຕ່ບໍ່ແມ່ນເງື່ອນໄຂອັນດຽວຂອງການບັນລຸອິດສະຫລະພາບ. ອິດສະຫຼະພາບ ແມ່ນການເຄື່ອນໄຫວແບບມີສະຕິ, ແບບມີເປົ້າໝາຍທີ່ສອດຄ່ອງ ກັບຄວາມຈຳເປັນທີ່ໄດ້ຮັບຮູ້ແລ້ວ. ການເຄື່ອນໄຫວດັ່ງນີ້ ແມ່ນແນໃສ່ເພື່ອ ການດັດສ້າງການຜະລິດວັດຖຸ ແລະ ການພົວພັນທາງສັງຄົມ ຊຶ່ງອຳນວຍໃຫ້ແກ່ - ການຊຸກຍູ້ຄວາມກ້າວໜ້າທາງສັງຄົມ. ອິດສະຫລະພາບໝາຍເຖິງການ ປົດປ່ອຍຄົນອອກຈາກການເປັນຂ້າທາດໃນສັງຄົມ, ອອກຈາກການຍອມກັບທຳມະຊາດ, ອອກຈາກຄວາມເສື່ອມຊາມ ແລະ ເສດເຫລືອຂອງອະດີດ.

ລັດທິມາກ-ເລນິນ ຢືນຢູ່ໃນທັດສະນະຊົນຊັ້ນເພື່ອໄຂແຍກອິດສະຫລະພາບ ແລະຕີລາຄາມັນເປັນຄືມາດຕະຖານປະຫວັດສາດຕົວຈິງ. ລັກສະນະແລະຄວາມອຳດສາມາດທາງດ້ານປະຫວັດສາດຂອງລະດັບການຂະຫຍາຍຕົວ ຂອງສັງຄົມໃນຂັ້ນທີ່ກ່ຽວຂ້ອງນັ້ນ ກຳນົດຂອບເຂດອິດສະຫລະພາບຂອງຄົນ. ສັງຄົມນິຍົມແມ່ນສັງຄົມທີ່ມີການພົວພັນທາງສັງຄົມ ທີ່ຍຸດຕິທຳ ທີ່ສຸດ, ແມ່ນສັງຄົມ ຂອງ-ແຮງງານທີ່ຖືກປົດປ່ອຍແລ້ວ, ແມ່ນສັງຄົມທີ່ມີອິດສະຫລະພາບຂອງບຸກຄົນແລະມີຮູບແບບປະຊາທິປະໄຕທີ່ສູງ. ຈຸດໝາຍອັນສູງສົ່ງຂອງສັງຄົມຄືດັ່ງນີ້: ຄົນ ແລະ ຄວາມຕ້ອງການຂອງຄົນ,ການຂະຫຍາຍຕົວຢ່າງສອດຄ່ອງກົມກຽວຂອງຄົນ.

ໃນຖານະເປັນວິທະຍາສາດ ລັດທິວັດຖຸນິຍົມ ບໍ່ພຽງແຕ່ມີກົດເກນເທົ່ານັ້ນ ແຕ່ຍັງມີມາດຕະເກນທີ່ສ່ອງແສງເຖິງດ້ານ ແລະ ສາຍພົວພັນທີ່ເປັນທາດ ແທ້ກວ່າໝູ່ ຂອງບັນດາປະກົດການໃນຊີວິດສັງຄົມ. ມາດຕະເກນເຊັ່ນ ການດຳລົງຄົງຕົວສັງຄົມ ແລະ ສະຕິສັງຄົມ, ກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການ ຜະລິດ, ໂຄງລ່າງ ແລະ ໂຄງບົນ, ອິດສະຫລະພາບ ແລະ ຄວາມຈຳເປັນ, ເງື່ອນໄຂພາວະວິໄສ ແລະ ປັດໄຈອັດຕະວິໄສນັ້ນ ສ່ອງແສງເຖິງສາຍພົວພັນພາຍໃນລະຫວ່າງ ສິ່ງກົງກັນຂ້າມກັນ ທີ່ຢູ່ໃນ ຄວາມເປັນເອກະພາບນຳກັນ. ຮູບຖານຈັດຕັ້ງສັງຄົມເສດຖະກິດ ກຳນົດລັກສະນະຮອບດ້ານຂອງສັງຄົມ. ມາດຕະເກນເຊັ່ນລັດ, ມະຫາຊົນ, ຊົນຊັ້ນ,ພັກການ

ເມື່ອງນັ້ນ ສ່ອງແສງເຖິງໂຄງຮ່າງທາງດ້ານສັງຄົມ-ການເມືອງຂອງສັງຄົມ, ຂະບວນວິວັດແຫ່ງການຂະຫຍາຍຕົວຂອງສັງຄົມ ສະແດງອອກມາໂດຍຜ່ານ - ມາດຕະເກນເຊັ່ນ ຄວາມກ້າວໜ້າທາງສັງຄົມ, ການຕໍ່ສູ້ຊົນຊັ້ນ, ການປະຕິວັດສັງຄົມ ແລະ ອື່ນໆ.

ການສັງລວມບັນດາກົດເກນ ແລະ ມາດຕະເກນຂອງລັດທິວັດຖຸນິຍົມປະຫວັດວິພາກ ໄດ້ສ່ອງແສງໃຫ້ເຫັນພາບຂະບວນວິວັດແຫ່ງປະຫວັດສາດ. ລັດທິວັດຖຸນິຍົມປະຫວັດວິພາກ ບໍ່ພຽງແຕ່ເປັນທິດສະດີດ້ານສັງຄົມສາດລວມ. ທິດສະດີລວມຂອງລັດທິວັດຖຸນິຍົມປະຫວັດວິພາກ ທີ່ຫມູນໃຊ້ເຂົ້າໃນການວິໄຈຊີວິດສັງຄົມ, ການປ່ຽນແປງດ້ານພຶດຕິກຳປະຕິວັດຕົວຈິງຂອງຊີວິດສັງຄົມນັ້ນ ແມ່ນວິທີລັດທິວັດຖຸນິຍົມປະຫວັດວິພາກ.

ຜູ້ສ້າງຕັ້ງລັດທິມາກ-ເລນິນ ໄດ້ເນັ້ນຫນັກວ່າ ຄວາມເຂົ້າໃຈແບບລັດທິ-ວັດຖຸນິຍົມກ່ຽວກັບປະຫວັດສາດນັ້ນ ບໍ່ແມ່ນທິດສະດີ ແລະ ບໍ່ແມ່ນຕຳລາທີ່ແຂງກະດ້າງ, ຫາກແມ່ນວິທີຄົ້ນຄວ້າ ແລະ ແມ່ນການຊີ້ທິດທາງໃຫ້ມັນ. ຄວາມຫມາຍດ້ານວິທີການຂອງລັດທິວັດຖຸນິຍົມປະຫວັດວິພາກ ສະແດງອອກໃນ ການພົວພັນຂອງມັນກັບວິທະຍາສາດອື່ນໆນັ້ນ ຢ່າງຫລາຍທີ່ສຸດ ແລະ ກ່ອນອື່ນຫມົດກັບບັນດາວິທະຍາສາດສັງຄົມສະເພາະ,ທີ່ຫມູນໃຊ້ລັດທິວັດຖຸນິຍົມປະຫວັດ ວິພາກ ເປັນວິທີການວິທະຍາສາດ.

ບັນດາວິທະຍາສາດສັງຄົມສະເພາະ ຄົ້ນຄວ້າຊີວິດສັງຄົມດ້ານໃດດ້ານ - ຫນຶ່ງ ຫລືລວບລວມດ້ານດັ່ງກ່າວ ທີ່ແນ່ນອນ. ລັດທິວັດຖຸນິຍົມປະຫວັດວິພາກ-ຄົ້ນຄວ້າສັງຄົມເປັນຄືສິ່ງອັນຫນຶ່ງອັນດຽວ, ຄົ້ນຄວ້າສາຍພົວພັນກັນລະຫວ່າງ-ດ້ານຕ່າງໆຂອງມັນ, ຄົ້ນຄວ້າສາຍເຫດພື້ນຖານຂອງການຂ້າມຜ່ານຈາກ ຮູບຖານຈັດຕັ້ງສັງຄົມ ເສດຖະກິດ ອັນຫນຶ່ງໄປສູ່ ອີກອັນຫນຶ່ງ. ມັນຊ່ວຍໃຫ້ ຕີລາຄາຢ່າງຖືກຕ້ອງພົນສຳເລັດດ້ານວິທະຍາສາດສັງຄົມ, ໄຈ້ແຍກຂະບວນ ວິວັດຂອງການປະສົມປະສານກັນລະຫວ່າງວິທະຍາສາດດັ່ງກ່າວ, ກຳນົດຄວາມຫມາຍຂອງວິທີວິທະຍາສາດເຊັ່ນ ວິທີວິທະຍາສາດສະເພາະ. ໃນນັ້ນລັດທິ - ມາກຕ້ານຄວາມພະຍາຍາມຢາກຕີລາຄາດກວາດພຽງກົດເກນທຳມະຊາດ ແລະ ສັງຄົມ, ຕ້ານການເຮັດໃຫ້ວິທີສະເພາະເປັນລັກສະນະເດັດຖານ, ຕ້ານການແຍກວິທີດັ່ງກ່າວ ຈາກກຳມະວິທີວິທະຍາຂອງລັດທິວັດຖຸນິຍົມປະຫວັດວິພາກ.

ລັດທິວັດຖຸນິຍົມປະຫວັດວິພາກ ແມ່ນທິດສະດີສັງຄົມສາດລວມ ແລະແມ່ນກຳມະວິທີວິທະຍາໃຫ້ແກ່ພຸກງານຄົ້ນຄວ້າທາງດ້ານສັງຄົມ, ເຊິ່ງໃນນັ້ນລວມທັງທິດສະດີສັງຄົມສາດ ສະເພາະ ( ກ່ຽວກັບຄອບຄົວ, ເວລາຫວ່າງ, ແຮງງານ, ຫມູ່ຄະນະ ແລະ ອື່ນໆ) ແລະ ການຄົ້ນຄວ້າທາງສັງຄົມແບບລະອຽດ

## ຝ. ລັກສະນະພັກ ແລະ ລັກສະນະປະດິດສ້າງ ຂອງລັດທິວັດຖຸນິຍົມປະຫວັດວິພາກ

ໃນຖານະເປັນວິທະຍາສາດດ້ານປັດຊະຍາ ກ່ຽວກັບສັງຄົມ ລັດທິວັດຖຸນິຍົມປະຫວັດວິພາກ ແມ່ນວິທະຍາສາດທີ່ມີລັກສະນະພັກ ແລະ ຈຸີນຈຸ້ນ. ລັກສະນະພັກ ແມ່ນທິດທາງແບບຖືກຕ້ອງຕາມກົດເກນພາວະວິໄສ ແລະ ທາງ ດ້ານຈຸີນຈຸ້ນຂອງແນວຄິດ, ທັດສະນະ ແລະ ທິດສະດີ ທີ່ໄດ້ຮັບການສ່ອງແສງອອກໃນການເຄື່ອນໄຫວ ແລະ ການກະທຳຂອງບັນດາກຸ່ມຄົນ ໃນສັງຄົມ, ບັນດາພັກການເມືອງ ແລະ ບາງບຸກຄົນສະເພາະ. ການສະແດງລັກສະນະພັກ ອັນສູງສົ່ງນັ້ນ ແມ່ນການກຳນົດທັດສະນະຈຸີນຈຸ້ນ ຄືປັດຊະຍາທີ່ກ່ຽວຂ້ອງໄດ້ ສະແດງເຖິງຜົນປະໂຫຍດຂອງໃຜ, ຂອງຈຸີນຈຸ້ນໃດໃນຂັ້ນສຸດທ້າຍ. ລັດທິວັດຖຸນິຍົມປະຫວັດວິພາກ ໄດ້ປະກາດຢ່າງເປີດເຜີຍວ່າ ຕົນແມ່ນອາວຸດດ້ານແນວຄິດ ແລະ ຈິດໃຈຂອງຈຸີນຈຸ້ນກຳມາຈີບ ໃນການຕໍ່ສູ້ຈຸີນຈຸ້ນ. ທິດສະດີຈະອະທິບາຍໂລກຢ່າງຖືກຕ້ອງ ພຽງແຕ່ໃນເມື່ອ ໄດ້ຄົ້ນພົບເສັ້ນທາງແຫ່ງການ ຫັນປ່ຽນຂອງໂລກເທົ່ານັ້ນ. ປັດຊະຍາມາກ-ເລນິນ ນັ້ນເອງແມ່ນທິດສະດີແບບນີ້. "ຄືກັນກັບທີ່ປັດຊະຍາໄດ້ພົບວ່າ ຈຸີນຈຸ້ນກຳມາຈີບຄືອາວຸດດ້ານວັດຖຸ ຂອງຕົນ , ຈຸີນຈຸ້ນກຳມາຈີບ ກໍ່ໄດ້ພົບວ່າ ປັດຊະຍາເປັນອາວຸດທາງແນວຄິດຂອງຕົນເຊັ່ນດຽວກັນ..." [1].

ໃນລັດທິວັດຖຸນິຍົມປະຫວັດວິພາກ ລັກສະນະພັກ ແລະ ລັກສະນະ ພາວະວິໄສ ແບບວິທະຍາສາດໄດ້ເຊື່ອມຈອດເຂົ້າກັນແບບກາຍອິນຊີ. ທັດສະນະ -

---

໑) ກ.ມາກ ແລະ ຟ.ອັງແກນ ບົດນິພົນ ເຫລັ້ມທີ ໑, ໜ້າ ໔໔໘.

ແບບ ເລນິນ ກ່ຽວກັບການຄົ້ນຄວ້າບັນດາປະກົດການດ້ານສັງຄົມນັ້ນ ແມ່ນ ຄວາມເປັນເອກະພາບແບບກາຍອິນຊີ ລະຫວ່າງລັກສະນະພາວະວິໄສແບບ ວິທະຍາສາດ ແລະ ການຕີລາຄາແບບມີຫລັກການຕໍ່ບັນດາປະກົດການດັ່ງກ່າວ- ໂດຍຢືນຢູ່ໃນທັດສະນະຂອງຊົນຊັ້ນກຳມະກອນ. ວ.ອີ.ເລນິນ ໄດ້ເນັ້ນ ໜັກຫລາຍຄັ້ງແລ້ວວ່າຄວາມເຂົ້າໃຈ ກ່ຽວກັບລັກສະນະພາວະວິໄສ ແບບວິທະຍາສາດ ໄດ້ກອມເອົາການວິເຄາະໄຈ້ແຍກຜົນປະ ໂຫຍດທາງຊົນຊັ້ນ ແລະການພົວພັນຊຶ່ງກັນ ແລະ ກັນ ລະຫວ່າງບັນດາຊົນຊັ້ນ, ລະຫວ່າງຊາດແລະ ລັດ. ອັນນີ້ກໍຍອມວ່າ ຜົນປະໂຫຍດຂອງຊົນຊັ້ນກຳມາຊີບ ສອດຄ່ອງກັບບາດກ້າວພາວະວິໄສຂອງການຂະຫຍາຍຕົວທາງປະຫວັດສາດ, ກັບກົດເກນປະຫວັດສາດ. ເພື່ອເຮັດໃຫ້ຜົນປະໂຫຍດທາງຊົນຊັ້ນຂອງຕົນປະກົດຜົນເປັນຈິງຂຶ້ນບົນພື້ນຖານຊຸດົມຄະຕິກອມມູນິດນິຍົມນັ້ນ ຊົນຊັ້ນກຳມະກອນມີຄວາມສົນໃຈໃນການ ສ່ອງແສງເຖິງກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມຢ່າງຖືກຕ້ອງກັບສັດຈະທຳ

ລັກສະນະພັກຂອງລັດທິວັດຖຸນິຍົມປະຫວັດວິພາກ ໄດ້ສະແດງອອກໃນທ່າທີບໍ່ຍິນຍອມຢ່າງເດັດຂາດຕໍ່ສັງຄົມສາດນາຍທຶນ, ຕໍ່ລັດທິສວຍໂອກາດ, ຕໍ່ລັດທິແກ້ພູກງທ່າອຽງ ແລະ ໄດ້ສະແດງອອກໃນການຕໍ່ສູ້ຢ່າງເປັນປະຈຳກັບທຸກ ໆ ທັດສະນະທີ່ຕ້ານລັດທິມາກ.

ມາກ ແລະ ອັງແກນ ໄດ້ສ້າງຕັ້ງຫລັກການມີລັກສະນະພັກ ໃນປັດຊະຍາ ແລະ ຕໍ່ມາ ເລນິນ ໄດ້ເສີມຂະຫຍາຍຫລັກການນີ້ ໃນບົດນິພົນຂອງເພິ່ນ.ບັນດາຜົນງານດ້ານປັດຊະຍາຂອງຜູ້ສ້າງຕັ້ງລັດທິມາກ-ເລນິນ ( ເຊັ່ນ"ຄຳ ຖະແຫລງການຂອງພັກກອມມູນິດ", "ຄວາມຕ່ຳຕ້ອຍຂອງປັດຊະຍາ", "ອັງຕີ-ດູຣິງ " ຂອງມາກ ແລະ ອັງແກນ,"ລັດທິວັດຖຸນິຍົມ ແລະ ລັດທິບົດຮຽນຕຳໜິວິພາກ", "ລັດ ແລະ ການປະຕິວັດ " ຂອງ ເລນິນ ) ເຕັມໄປດ້ວຍຈິດໃຈລັກສະນະພັກ, ທ່າທີເດັດຂາດຕໍ່ທຸກໆການຫລີກລ່ຽງຈາກສັດຈະທຳ.

ຊົນຊັ້ນກຳມະກອນ, ປະຊາຊາດທີ່ຖືກກົດຂີ່ຂູດຣີດລ້ວນແຕ່ໄດ້ອີງໃສ່ທັດສະດີມາກ-ເລນິນ, ທິດສະດີ ແລະ ວິທີຂອງລັດທິວັດຖຸນິຍົມປະຫວັດວິພາກ ໃນການຕໍ່ສູ້ເພື່ອການປົດປ່ອຍສັງຄົມ ແລະ ປົດປ່ອຍຊາດ, ໃນການວາງຍຸດທະສາດ ແລະ ຍຸດໂທບາຍ. ລັດທິມາກ ໄດ້ພິສູດແລ້ວວ່າ ແຕ່ລະການຕໍ່ສູ້ໃນສັງຄົມ (ດ້ານການເມືອງ, ກົດໝາຍ, ຊຸນສົມບັດ, ສາສະໜາ) ໄດ້ສະແດງ

ເຖິງການຕໍ່ສູ້ລະຫວ່າງຊົນຊັ້ນ, ເຊິ່ງມີການສົ່ງຢູ່ທີ່ກຳນົດດ້ວຍຖານະດ້ານເສດຖະກິດຂອງແຕ່ລະຊົນຊັ້ນ.

ຈະແຍກລັກສະນະພັກຂອງລັດທິວັດຖຸນິຍົມປະຫວັດວິພາກ ອອກຈາກລັກສະນະປະດິດສ້າງຂອງມັນແມ່ນບໍ່ໄດ້. ແບບຢ່າງອັນເຫລື້ອມໃສຂອງທັດສະນະ - ແບບປະດິດສ້າງ ກ່ຽວກັບການຄົ້ນຄວ້າສັງຄົມນັ້ນ ແມ່ນການທີ່ ວ.ອິ. ເລນິນ ໄດ້ເສີມຂະຫຍາຍບັນຫາລັດທິວັດຖຸນິຍົມປະຫວັດວິພາກ, ເຊັ່ນການພົວພັນ ກັນລະຫວ່າງສະຕິສັງຄົມ ແລະ ການດຳລົງຊີວິດຂອງສັງຄົມ, ລະຫວ່າງ ເສດຖະກິດ ແລະ ການເມືອງ, ລະຫວ່າງບົດບາດຂອງມະຫາຊົນ ແລະ ບຸກຄົນໃນປະຫວັດສາດ. ເລນິນ ໄດ້ສ້າງຕົວຢ່າງມີຫົວຄິດປະດິດສ້າງທິດສະດີ ກ່ຽວກັບການປະຕິວັດສັງຄົມນິຍົມ, ໄດ້ເສີມຂະຫຍາຍທິດສະດີວ່າດ້ວຍພະເດັດການຂອງຊົນຊັ້ນກຳມາຊີບ ແລະ ການກໍ່ສ້າງສັງຄົມນິຍົມ.

ລັດທິວັດຖຸນິຍົມປະຫວັດວິພາກ ໄດ້ຮັບການເສີມຂະ ຫຍາຍອອກມາ ຢ່າງເປັນປະຈຳບົນພື້ນຖານການສັງລວມດ້ານທິດສະດີ ຂອງບົດຮຽນອັນລ້ຳຄ່າຂອງການຕໍ່ສູ້ປະຕິວັດ ແລະ ການກໍ່ສ້າງກອມມູນິດນິຍົມ. ການສັງລວມດ້ານທິດສະດີດັ່ງກ່າວ ມີຢູ່ໃນເອກະສານຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ ແລະ ໃນບົດນິພົນກ່ຽວກັບທິດສະດີຂອງບັນດາພັກລັດທິມາກ-ເລນິນອື່ນໆ. ໃນບົດລາຍງານຂອງສູນກາງ ພ.ກ.ສ.ຊ. ຕໍ່ກອງປະຊຸມໃຫຍ່ຄັ້ງທີ ໒໖ ຂອງ ພັກ ( ປີ ໑໙໘໑ ) ໄດ້ເນັ້ນໜັກວ່າ: "ພັກລັດທິມາກ-ເລນິນ ບໍ່ສາມາດຈະປະຕິບັດບົດບາດຂອງຕົນໄດ້ ຖ້າຫາກພັກບໍ່ເອົາໃຈໃສ່ຢ່າງເໝາະສົມໃນການ ວິເຄາະທຸກສິ່ງທີ່ເກີດຂຶ້ນ, ສັງລວມບັນດາປະກົດການໃໝ່ໃນຊີວິດ, ເສີມ ຂະຫຍາຍທິດສະດີລັດທິມາກ-ເລນິນ ຢ່າງມີຫົວຄິດປະດິດສ້າງ. ເວລາໃດ ພວກເຮົາກໍຖືວ່າໜ້າທີ່ນີ້ແມ່ນໜ້າທີ່ສຳຄັນເປັນພິເສດ..." ໑).

ລັດທິວັດຖຸນິຍົມປະຫວັດວິພາກ ກໍຄືທັງທິດສະດີລັດທິມາກ-ເລນິນ ເອົາລວມ, ຕາມຫາດແທ້, ຕາມຈຸດປະສົງທາງຊົນຊັ້ນ ແລະ ທິດທາງ ຂະຫຍາຍຕົວແລ້ວ ແມ່ນທິດສະດີປັດຊະຍາທີ່ມີລັກສະນະສາກົນ. ຫລັກການ, ກົດເກນ ແລະມາດຕະເກນຂອງລັດທິວັດຖຸນິຍົມປະຫວັດວິພາກ ເປັນທິດສະດີປັດຊະຍາ-

---

໑). ເອກະສານກອງປະຊຸມໃຫຍ່ຄັ້ງທີ ໒໖ ພ.ກ.ສ.ຊ., ໜ້າທີ ກກ.

ພຽງທິດສະດີດຽວເທົ່ານັ້ນ ທັງວິທະຍາສາດ ແລະ ວິທີຄົ້ນຄວ້າປະຫວັດສາດ ແລະ ການຄິດສ້າງສັງຄົມແບບປະຕິວັດ, ມີການເຄື່ອນໄຫວແບບກ້າວໜ້າ - ຂອງຄົນ. ແຕ່ລະແນວຄິດທີ່ວ່າ ມີລັດທິມາກແບບສະເພາະສຳລັບແຕ່ລະປະເທດນັ້ນແມ່ນ ຍອມຮັບບໍ່ໄດ້ ເພາະວ່າທິດສະດີນີ້ມີລັກສະນະສາກົນ ເຊັ່ນດຽວກັນກັບກະໂຕຂະບວນການກຳມະກອນ. ທຸກໆຄວາມພະຍາຍາມຢາກເຮັດໃຫ້ ປັດຊະຍາມາກເຊື່ອມເຂົ້າ ກັບຈຸດພິເສດຂອງແຕ່ລະປະເທດໃນການສະແດງຕົວອອກຂອງມັນນັ້ນ ແມ່ນຍອມຮັບບໍ່ໄດ້. ລັດທິວັດຖຸນິຍົມປະຫວັດວິພາກໃນຖານະເປັນວິທະຍາສາດດ້ານປັດຊະຍາ ວ່າດ້ວຍສັງຄົມ, ໄດ້ຮັບການເສີມຂະຫຍາຍໃຫ້ອຸດົມຮັ່ງມີຂຶ້ນບົນພື້ນຖານພຶດຕິກຳຕົວຈິງຂອງຂະບວນການປະຕິວັດຂອງທຸກໆຊົນຊາດ ແລະ ປະຊາຊາດ, ໃນຂະນະດຽວກັນນັ້ນ ກໍຮັກສາລັກສະນະສາກົນຂອງຕົນໄວ້ຕະຫລອດເວລາ.

ປັດຊະຍາມາກ ລວມທັງລັດທິວັດຖຸນິຍົມປະຫວັດວິພາກ ຊ່ວຍໃຫ້ຄົນ ຮັບເອົາ ຫລັກໝັ້ນດ້ານແນວຄິດ, ເຂົ້າໃຈກ່ຽວກັບຄວາມເປັນເອກະພາບ ແບບກາຍອິນຊີ ລະຫວ່າງທິດສະດີ ແລະ ພຶດຕິກຳຕົວຈິງ, ຮັບເອົາສິ່ງໃໝ່, ອະນາຄົດແຫ່ງການຂະຫຍາຍຕົວ, ບໍ່ປະນີປະນອມກັບຄວາມເປື່ອຍເຍື່ອຍຂອງສັງຄົມ ແລະ ຄວາມບໍ່ຍຸດຕິທຳ, ຮັບເອົາຈິນຕະນາການແບບມີຫົວຄິດປະດິດສ້າງ ທີ່ບໍ່ອ່ອນຍອມຕໍ່ລັດທິຄຳພີຕາຍຕົວ, ບໍ່ອ່ອນຍອມຕໍ່ການຍຶດຖືແບບແຜນຊ້ຳ ຊາກ ແລະ ການຢຸດຊະງັກຢູ່ບ່ອນເກົ່າ, ເຂົ້າໃຈວ່າໂລກແມ່ນໂລກທີ່ເອກະ ພາບ ແລະ ຄົບຖ້ວນ, ແລະ ຮັບເອົາຖານະຂອງຄົນໃນໂລກນີ້.

ປັດຊະຍາມາກ-ເລນິນ ບໍ່ພຽງແຕ່ສາມາດອະທິບາຍໂລກຢ່າງຖືກຕ້ອງ - ເທົ່ານັ້ນ, ແຕ່ຍັງຊ່ວຍໃຫ້ພາລະກິດສັນຕິພາບ, ສັງຄົມນິຍົມ ແລະຄວາມກ້າວໜ້າໄດ້ຮັບໄຊຊະນະ.

## ພາກທີ ສອງ

## ສັງຄົມ ແລະ ທຳມະຊາດ

### ໑. ການກະທົບຊຶ່ງກັນ ແລະ ກັນ ລະຫວ່າງສັງຄົມ ແລະ ທຳມະຊາດ

ຖ້າຫາກບໍ່ຄົ້ນຄວ້າສາຍພົວພັນກັນ ແລະ ລັກສະນະອ້ອມຕໍ່ກັນ ລະຫວ່າງ ຊີວິດ ຂອງສັງຄົມມະນຸດກັບທະມະຊາດ ກໍບໍ່ອາດຈະເຂົ້າໃຈຊີວິດຂອງສັງຄົມມະນຸດໄດ້. ທຳມະຊາດ, ໃນຄວາມໝາຍອັນກວ້າງຂວາງ ກໍ່ຄືໂລກຈັກກະວານ, ກໍ່ຄືວັດຖຸ ແລະ ກວມເອົາທັງຄົນ ແລະ ສັງຄົມ. ໃນຄວາມໝາຍທີ່ແຄບກວ່ານີ້ ທຳມະຊາດໝາຍເຖິງສິ່ງແວດລ້ອມ ທີ່ເປັນວັດຖຸ, ເຊິ່ງກົງກັນຂ້າມກັບຄົນ ແລະ ສັງຄົມຢ່າງທຽບຖານ. ການຮັບຮູ້ຄວາມເປັນເອກະພາບກັນ ລະຫວ່າງ ສັງຄົມ ແລະ ທຳມະຊາດນັ້ນ ແມ່ນຫລັກການທີ່ສຳຄັນທີ່ສຸດ ຂອງຄວາມ ເຂົ້າໃຈ ກ່ຽວກັບປະຫວັດສາດແບບວັດຖຸນິຍົມ.

ສັງຄົມມີການພົວພັນກັບທຳມະຊາດ ກ່ອນອື່ນໝົດ ແມ່ນຍ້ອນຕົ້ນກຳເນີດຂອງຄົນ. ບັນດານັກປາດຖືວ່າຄົນໄດ້ວິວັດມາຈາກລີງຊະນິດພິເສດ. ຄວາມແຕກຕ່າງກັນ ລະຫວ່າງຄົນ ແລະ ສັດ, ລະຫວ່າງສັງຄົມມະນຸດ ກັບການ - ທ້ອນໂຮມຝູງສັດນັ້ນໃຫຍ່ຫລວງ, ຈົນວ່າເປັນເລື່ອງທີ່ບໍ່ອາດເປັນໄປໄດ້ທີ່ ວ່າ ສັດໄດ້ວິວັດມາເປັນຄົນໃນທັນໃດໂລດ. ຂະບວນວິວັດແຫ່ງການຜັນປ່ຽນແຕ່ ລີງມາເປັນຄົນນັ້ນ ໄດ້ດຳເນີນໄປແຕ່ລະກ້າວໃນໄລຍະຍາວນານທີ່ສຸດ.

ໃນຂະບວນວິວັດແຫ່ງການສ້າງຕັ້ງຄົນນັ້ນ ມີສອງໄລຍະ. ໄລຍະທີ ໜຶ່ງ ຕິດພັນກັບການເລີ່ມຕົ້ນຜະລິດເຄື່ອງມືອອກແຮງງານ * . ໄລຍະ ທີສອງ

---

*) ໃນໄລຍະຫລັງໆມານີ້ ຢູ່ພາກໃຕ້ ແລະ ພາກຕາເວັນອອກຂອງທະວີບອາ

( ເລີ່ມແຕ່ໄລຍະ ໑໐໐-໔໐ ພັນປີກ່ອນນີ້ ) ໝາຍເຖິງການເກີດມີຄົນ ສະໄໝໃໝ່. ຖືກັນວ່າ ນັບແຕ່ໄລຍະນັ້ນເປັນຕົ້ນມາ ບໍ່ມີການປ່ຽນແປງດ້ານພື້ນຖານໃນດ້ານຮ່າງກາຍຂອງຄົນ.

ຂະບວນວິວັດແຫ່ງການກຳເນີດຂອງຄົນ ແລະ ຂອງສັງຄົມມະນຸດນັ້ນ ໄດ້ຮັບການວິໄຈຢູ່ໃນບົດນິພົນຂອງ ຟຣີດຣິກ ອັງແກນ ທີ່ພາດຫົວເລື່ອງວ່າ "ບົດບາດຂອງການອອກແຮງງານໃນຂະບວນວິວັດແຫ່ງການພັນປ່ຽນຈາກລີງ ມາເປັນຄົນ". ບົດນິພົນນີ້ກ່າວວ່າ ບົດບາດທີ່ຕັດສິນຊີ້ຂາດໃນການກຳເນີດເກີດມີສັງຄົມມະນຸດນັ້ນ ໄດ້ແກ່ການອອກແຮງງານ, ການຜະລິດ ແລະ ນຳໃຊ້ເຄື່ອງມື ອອກແຮງງານ. ການນຳໃຊ້ເຄື່ອງມືອອກແຮງງານ ໄດ້ບັງຄັບໃຫ້ຄົນຕ້ອງປ່ຽນແປງບາດຍ່າງ, ຕ້ອງຢືນຂຶ້ນ. ໃນຂະບວນວິວັດແຫ່ງການ - ອອກແຮງງານຄົນຈຳເປັນຕ້ອງປາກເວົ້ານຳກັນ: ພາສາໄດ້ເກີດຂຶ້ນເພື່ອຕິດຕໍ່ພົວພັນກັນ. ແມ່ນກະໂຕແຮງງານນັ້ນເອງໄດ້ນຳໄປເຖິງການແຍກຕົວຄົນອອກຈາກຝູງສັດ, ນຳໄປເຖິງການກຳເນີດມີຈຸດພິເສດສະເພາະແຕ່ຄົນເທົ່ານັ້ນ,ຄືມັນສະໝອງທີ່ມີການຈັດຕັ້ງສູງ, ຈິດສຳນຶກ, ພາສາປາກເວົ້າທີ່ຈະແຈ້ງ , ຄວາມສາມາດຜະລິດເຄື່ອງມືອອກແຮງງານ.

ໃນເມື່ອແຍກຕົວອອກຈາກຝູງສັດແລ້ວ ຄົນໄດ້ຢຸດຕິສະພາບເປັນພຽງ ແຕ່ສິ່ງທີ່ມີຊີວິດດ້ານຊີວະສາດ. ແນ່ນອນບັນດາລັກສະນະສະເພາະດ້ານຊີວະສາດ (ເຊັ່ນຄວາມຕ້ອງການດ້ານສີລະສາດ, ສັນດານທຳມະຊາດ ແລະ ອື່ນໆ) ກໍ່ແມ່ນລັກສະນະສະເພາະຂອງຄົນສະໄໝໃໝ່ ແລະ ມີບົດບາດທີ່ສຳຄັນໃນ ຊີວິດຂອງຄົນ. ແຕ່ພ້ອມກັນນັ້ນ ບໍ່ແມ່ນມັນເປັນສິ່ງທີ່ກຳນົດທາດແທ້ຂອງຄົນ,ມັນບໍ່ແມ່ນອັນທີ່ຕົ້ນຕໍ. ຄົນຈັດເຂົ້າໃນຮູບແບບທີ່ສູງຂອງການເຄື່ອນເໜັງຂອງວັດຖຸຄືຊີວິດຂອງສັງຄົມ. ທາດແທ້ຂອງຄົນກຳນົດດ້ວຍການພົວພັນດ້ານສັງຄົມ ທີ່ປະກອບເປັນເງື່ອນໄຂດ້ານສັງຄົມແຫ່ງຊີວິດຂອງຄົນ ແລະ ຄົນເອງເປັນຜູ້ປະດິດສ້າງເງື່ອນໄຂດັ່ງກ່າວ. ອັນນີ້ແມ່ນເລື່ອງທີ່ຄົນຂຶ້ນກັບຍຸກສະໄໝ,ລະບອບ

---

ຟຣີກາມີການຄົ້ນພົບຊາກສົບຂອງບັນພະບຸລຸດຂອງຄົນ ທີ່ເກົ່າແກ່ທີ່ສຸດ ຢູ່ໃນຊັ້ນດິນ ທີ່ມີອາຍຸເຖິງ ໒,໕ ລ້ານປີ. ພ້ອມກັນກັບກະດູກຍັງໄດ້ຄົ້ນພົບ ເຄື່ອງມືທີ່ເຮັດດ້ວຍຫີນແບບງ່າຍດາຍທີ່ສຸດ.

ສັງຄົມທີ່ແນ່ນອນ, ຂຶ້ນກັບ ຊົນຊັ້ນໃດຫນຶ່ງ, ຊາດໃດຫນຶ່ງ ແລະ ອື່ນໆ.

. ການກຳເນີດຂອງສັງຄົມປະຖົມບູຮານໃນລະຫວ່າງ ໔໐ ພັນປີກ່ອນຫນ້ານີ້
ໄດ້ເລີ່ມຕົ້ນປະຫວັດສາດຂອງຄົນ.

ການກຳເນີດຂອງສັງຄົມມະນຸດ ຍັງຫມາຍເຖິງການກຳເນີດເກີດມີ ກົດ
ເກນໃຫມ່ດ້ານສັງຄົມ ທີ່ບໍ່ມີໃນທຳມະຊາດ. ໂດຍແຕກຕ່າງກັບທຳມະຊາດ -
ບ່ອນທີ່ກຳລັງທຳມະຊາດອັນມືດມົນ ແລະ ບໍ່ມີສະຕິເປັນສິ່ງທີ່ສົ່ງຜົນສະທ້ອນໃສ່
ນັ້ນ ໃນສັງຄົມ ຄົນເປັນຜູ້ສົ່ງຜົນສະທ້ອນ,ດ້ວຍຈິດສຳນຶກ ແລະ ມານະຈິດທີ່-
ເປັນລັກສະນະສະເພາະຂອງພວກເຂົາເຈົ້າ ທີ່ໄດ້ວາງຈຸດປະສົງອັນແນ່ ນອນ
ແລະ ຕໍ່ສູ້ ເພື່ອບັນລຸຈຸດປະສົງດັ່ງກ່າວ. ໃນສັງຄົມມະນຸດ ບໍ່ມີຫຍັງທີ່ຈະ ດຳ
ເນີນໄປໂດຍບໍ່ມີເປົ້າຫມາຍຢ່າງມີສະຕິ ແລະ ໂດຍບໍ່ມີຈຸດປະສົງທີ່ປາຖະຫນາ.

ກ.ມາກ ແລະ ຟ.ອັງແກນ ໄດ້ຄົ້ນພົບບັນດາກົດເກນທີ່ແທ້ຈິງກ່ຽວກັບ -
ການຂະຫຍາຍຕົວຂອງສັງຄົມນັ້ນ ເປັນຄັ້ງທຳອິດ. ຄວາມພະຍາຍາມຂອງບັນ
ດານັກປັດຊະຍານາຍທຶນທີ່ຢາກຫມູນໃຊ້ກົດເກນທຳມະຊາດ ເຂົ້າໃນຊີວິດຂອງ
ສັງຄົມນັ້ນ ແມ່ນການຝືນວິທະຍາສາດ ແລະ ເປັນປະຕິການ. ພວກເຂົາຫຼາຍ
ຄົນໄດ້ພະຍາຍາມອະທິບາຍຂະບວນວິວັດດ້ານສັງຄົມ ໂດຍຢືນຢູ່ໃນທັດສະນະ-
ດ້ານວັດຖຸວິທະຍາ, ຊີວະສາດ ແລະ ວິທະຍາສາດທຳມະຊາດອື່ນໆ. ເຊັ່ນ
ຕົວຢ່າງ ໃນປະຈຸບັນນີ້ ລະຫວ່າງບັນດານັກປາດນາຍທຶນ ໄດ້ມີການແຜ່ຂະ
ຫຍາຍອັນທີ່ເອີ້ນວ່າ ແມ່ນຊີວະສາດສັງຄົມ. ບັນດາຜູ້ຕາງຫນ້າຂອງຂະແຫນງ
ນີ້ພະຍາຍາມຢາກຫມູນໃຊ້ຜົນສຳເລັດດ້ານການສືບເຊື້ອ* ສະໄຫມໃຫມ່ນັ້ນເພື່ອ
ອະທິບາຍປະກົດການທາງສັງຄົມ. ພວກເຂົາເຈົ້າໃຊ້ຈຸດພິເສດຂອງການ ປະ
ກອບແນວສືບເຊື້ອ ( ທາດປະສົມໃນຈຸລັງ ທີ່ມີຊີວິດ, ທີ່ແມ່ນຕົ້ນເຫດ ຂອງ
ການສືບເຊື້ອ ) ເພື່ອມາອະທິບາຍປະກົດການເຊັ່ນ ລັກສະນະຮຸກຮານ,ແນວ
ຄິດເຫັນແກ່ຜູ້ອື່ນ** ແລະ ອື່ນໆ.

ໃນຕົວຈິງແລ້ວ, ການກຳເນີດຂອງສັງຄົມມະນຸດ ແມ່ນການປ່ຽນແປງ -

---

* ການສືບເຊື້ອແມ່ນວິທະຍາສາດວ່າດ້ວຍກົດເກນການສືບທອດແລະ ລັກສະ
ນະປ່ຽນແປງຂອງຮ່າງກາຍ.

** ແນວຄິດເຫັນແກ່ຜູ້ອື່ນແມ່ນຫລັກການສົນທຳຮັບໃຊ້ຜູ້ອື່ນຢ່າງບໍ່ຫວັງ ສິ່ງ
ຕອບແທນໃດໆ.

ດ້ານຄຸນນະພາບທີ່ເລິກເຊິ່ງ ໃນການຂະຫຍາຍຕົວຂອງໂລກ ທີ່ເປັນ ວັດຖຸ, ແມ່ນການປະກົດຕົວຂຶ້ນຂອງປະກົດການ ແລະ ກົດເກນທາງສັງຄົມ ທີ່ ໃໝ່ດ້ານຄຸນນະພາບ.

ໂດຍກຳເນີດຂຶ້ນມາຈາກທຳມະຊາດ ແລະ ຕັດແຍກອອກຈາກທຳມະຊາດໃນລະດັບທີ່ແນ່ນອນແລ້ວ, ແຕ່ສັງຄົມບໍ່ໄດ້ສູນເສຍ ການພົວພັນກັບທຳມະຊາດ. ຍິ່ງກວ່ານັ້ນ ສາຍພົວພັນຢ່າງເປັນປະຈຳລະຫວ່າງສັງຄົມກັບ ທຳມະຊາດ ແມ່ນປະຖົມປັດໄຈ ແລະ ເງື່ອນໄຂໃຫ້ແກ່ການຄົງຢູ່ ແລະ ການ ຂະຫຍາຍຕົວຂອງສັງຄົມ. ກ່ອນອື່ນໝົດ ທຳມະຊາດມີຄວາມໝາຍດ້ານການຜະລິດສຳລັບຄົນ. ໃນຂະບວນວິວັດແຫ່ງການຜະລິດ ຄົນດັດສ້າງສິ່ງວັດຖຸທຳມະ-ຊາດຢ່າງສອດຄ່ອງກັບຄວາມຈຳເປັນ ແລະ ຄວາມຣຽກຣ້ອງຕ້ອງການ ຂອງຕົນເຊັ່ນ ຂຸດຄົ້ນບໍ່ແຣ່ແລ້ວຫລອມທາດໂລຫະ ທີ່ຕົນຕ້ອງການ, ນຳໃຊ້ຊັບພະຍາກອນປ່າໄມ້, ພະລັງງານຂອງແມ່ນ້ຳ ແລະ ອື່ນໆ.

ເຖິງແມ່ນວ່າ ຄວາມໝາຍດ້ານການຜະລິດຂອງທຳມະຊາດມີຄວາມ ສຳຄັນທີ່ສຸດສຳລັບຄົນກໍຕາມ, ແຕ່ມັນບໍ່ຈຳກັດພຽງເທົ່ານີ້. ການພົວພັນກັບທຳມະຊາດຊ່ວຍໃຫ້ຄົນຣັກສາ ແລະ ຟື້ນຟູສຸຂະພາບດ້ານກຳລັງກາຍ ແລະ ຄຸນສົມ-ບັດ. ບໍ່ແມ່ນເລື່ອງບັງເອີນທີ່ວ່າ ຕາມທຳມະດາແລ້ວ ຜູ້ຄົນທີ່ມີອາຍຸຍືນ ໃນໂລກນັ້ນແມ່ນຜູ້ທີ່ດຳລົງຊີວິດຢູ່ເຂດຊົນນະບົດ, ຜູ້ທີ່ຢູ່ທ່າມກາງອາກາດສົດຊື່ນ, ໝາຍຄວາມວ່າ ມີການພົວພັນຢ່າງຫລາຍກັບທຳມະຊາດ. ທຳມະຊາດ ສອນໃຫ້ຄົນແນມເຫັນ ແລະ ເຂົ້າໃຈຄວາມງາມ (ຄວາມໝາຍຂອງສິລະປະທັດ). ເປັນເລື່ອງມີ ເຫດຜົນ ເມື່ອເວົ້າເຖິງຄວາມໝາຍດ້ານສຶກສາອົບຣົມ ທີ່ທຳມະຊາດມີຕໍ່ຄົນ. ທ່າທີແບບໂອບອ້ອມອາລີ, ເປັນຫ່ວງເປັນໃຍຂອງຄົນຕໍ່ທຳ-ມະຊາດແວດລ້ອມນັ້ນ ອົບລົມຄວາມໃຈບຸນ, ນ້ຳໃຈເວທະນາຕໍ່ຜູ້ທີ່ອ່ອນ ແອ ແລະ ຂາດການປົກປ້ອງ.

ທຳມະຊາດແວດລ້ອມ ສາມາດຊຸກຍູ້ ຫລືຖ່ວງດຶງບາດກ້າວແຫ່ງການ ຂະຫຍາຍຕົວຂອງບັນດາປະເທດ ແລະ ປະຊາຊົນ,ແລະ ໃນຫລາຍກໍລະນີ ໄດ້ສົ່ງຜົນສະທ້ອນທີ່ມີຄວາມໝາຍຕັດສິນຊີ້ຂາດຕໍ່ການຂະຫຍາຍຕົວດ້ານນີ້ຫລືດ້ານນັ້ນຂອງການຜະລິດ. ເຊັ່ນຕົວຢ່າງປະເທດລາວມີບໍ່ແຣ່ໃນພື້ນດິນເຊັ່ນ ແຣ່ກົ່ວແລະອື່ນໆ, ມີໄມ້ຊະນິດທີ່ມີລາຄາແພງ (ໄມ້ສັກ...) ນັ້ນແມ່ນປັດໄຈທີ່ຊຸກຍູ້

ການຂະຫຍາຍຕົວຂອງສັງຄົມ. ທ່ານໄກສອນ ພົມວິຫານໄດ້ເວົ້າວ່າ: "ກະສິກຳ ແລະ ປ່າໄມ້ຂອງປະເທດເຮົາມີທ່າແຮງຂອງການກະສິກຳ ແລະ ປ່າໄມ້ເຂດຮ້ອນ, ເນື້ອທີ່ດິນປູກຝັງຍັງຫລາຍ ມີທົ່ງຫຍ້າອັນກວ້າງໃຫຍ່ ແລະ ມີປ່າໄມ້ທີ່ມີຄ່າຢູ່ຫລາຍແຫ່ງ..." ໑)

ແຕ່ເງື່ອນໄຂທຳມະຊາດບໍ່ແມ່ນປັດໃຈຕົ້ນຕໍ ທີ່ກຳນົດບາດກ້າວແຫ່ງ ການຂະຫຍາຍຕົວດ້ານສັງຄົມ. ການປ່ຽນແປງຢ່າງເຖິງກົກເຖິງຮາກ ໃນສັງຄົມ, ຕົວຢ່າງການປະຕິວັດທາງສັງຄົມ ບໍ່ແມ່ນເກີດຂຶ້ນມາຍ້ອນມີການປ່ຽນແປງດ້ານເງື່ອນໄຂທຳມະຊາດ, ຫາກແມ່ນຍ້ອນຄວາມຮຽກຮ້ອງຕ້ອງການຂອງກະໂຕ-ສັງຄົມເອງ, ຍ້ອນຄວາມຂັດແຍ່ງພາຍໃນສັງຄົມ. ບົດບາດທີ່ຕັດສິນຊີ້ຂາດໃນການຂະຫຍາຍຕົວຂອງສັງຄົມນັ້ນ ໄດ້ແກ່ແບບວິທີການຜະລິດຊັບສິນວັດຖຸ.

ການພົວພັນລະຫວ່າງສັງຄົມ ແລະ ທຳມະຊາດມີລັກສະນະກະທົບຊຶ່ງ ກັນ ແລະ ກັນ. ອັນນີ້ໝາຍຄວາມວ່າ ບໍ່ພຽງແຕ່ທຳມະຊາດກະທົບຕໍ່ການ ຂະຫຍາຍຕົວຂອງສັງຄົມເທົ່ານັ້ນ ແຕ່ສັງຄົມກໍ່ສົ່ງຜົນສະທ້ອນໃສ່ທຳມະຊາດ ເຊັ່ນດຽວກັນ. ການກະທົບເຊິ່ງກັນ ແລະ ກັນລະຫວ່າງຄົນ ແລະ ທຳມະຊາດ ມີການແຕກຕ່າງກັນດ້ານທາດແທ້ກັບການພົວພັນເຊິ່ງກັນ ແລະ ກັນລະຫວ່າງທຳມະຊາດກັບສັດ. ສັດປັບຕົວເຂົ້າຫາທຳມະຊາດເປັນຕົ້ນຕໍ. ຫລືວ່າປ່ຽນ ແປງທຳມະຊາດພຽງເລັກໜ້ອຍ ດ້ວຍກະໂຕເຫດການຕົວຈິງແຫ່ງການຄົງຢູ່ຂອງ-ຕົນ. ສ່ວນຄົນປ່ຽນແປງທຳມະຊາດ, ດັດສ້າງມັນ, ເຮັດໃຫ້ມັນສອດຄ່ອງກັບຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການຂອງຕົນ. ຟ.ອັງແກນ ໄດ້ຂຽນວ່າ: "...ສັດພຽງແຕ່ໝູນໃຊ້ທຳມະຊາດພາຍນອກ ແລະ ເຮັດໃຫ້ທຳມະຊາດມີການປ່ຽນແປງຍ້ອນການຄົງຢູ່ຂອງຕົນເທົ່ານັ້ນ; ສ່ວນຄົນໝູນ ໃຊ້ການປ່ຽນແປງທີ່ຕົນໄດ້ສ້າງຂຶ້ນມາ ເພື່ອບັງຄັບໃຫ້ທຳມະຊາດຮັບໃຊ້ຈຸດປະສົງຂອງຕົນ, ເປັນເຈົ້າຂອງທຳມະຊາດ..." ໒).

ຂະໜາດຂອງການທີ່ສັງຄົມກະທົບຕໍ່ທຳມະຊາດນັ້ນຂຶ້ນກັບລະດັບ ການຂະ

---

໑) ໄກສອນພົມວິຫານ."ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ". ສຳນັກພິມຈຳໜ່າຍ ສ.ປ.ປ.ລ. ໑໙໗໙.ໜ້າ ໖໒໑.

໒) ກ.ມາກ ແລະ ຟ.ອັງແກນ.ບົດນິພົນເຫລັ້ມທີ ໒໐, ໜ້າ ໔໙໕.

ຫຍາຍຕົວຂອງກຳລັງແຫ່ງການຜະລິດ, ຂຶ້ນກັບການປະກອບພະລັງງານ ຂອງສັງຄົມ,ຂຶ້ນກັບການປະກອບເຕັກນິກຂອງສັງຄົມ.ຈຸດພິເສດຂອງການກະທົບຊຶ່ງກັນ ແລະ ກັນລະຫວ່າງສັງຄົມແລະທຳມະຊາດ ໃນສະໄໝປະຈຸບັນນີ້ ຢູ່ບ່ອນວ່າ ໜ້າດິນຂອງທົ່ວທັງໜ່ວຍພິພົບ ໄດ້ກາຍເປັນຂົງເຂດແຫ່ງການເຄື່ອນ - ໄຫວຂອງຄົນ. ຄົນໝູນໃຊ້ເກືອບທຸກໆທາດທີ່ປະກອບເປັນເປືອກໂລກ ແລະ ໝູນໃຊ້ເກືອບທຸກໆຊັບພະຍາກອນພະລັງງານທຳມະຊາດ, ຈົນວ່າ ເດີນອອກຈາກຂອບເຂດຂອງໜ່ວຍພິພົບ, ຂຶ້ນສູ່ອະວະກາດ.

ໃນຫລາຍກໍລະນີ ການກະທົບຂອງຄົນຕໍ່ທຳມະຊາດມີລັກສະນະເກີດ ຂຶ້ນເອງ ແລະ ບໍ່ອາດຈະກວດກາໄດ້. ເພື່ອຈຸດປະສົງສະເພາະໜ້າແລະ ລະອຽດອັນໃດໜຶ່ງ, ບໍ່ແມ່ນເວລາໃດຄົນກໍ່ສາມາດຄາດຄະເນໄດ້ວ່າ ການກະ-ທົບຕໍ່ທຳມະຊາດແບບນີ້ຫລືແບບນັ້ນ ຈະນຳໄປເຖິງຜົນສະທ້ອນທີ່ບໍ່ເພິ່ງປາຖະ-ໜາໃນອະນາຄົດ. ດ້ວຍເຫດນີ້ຈຶ່ງເກີດມີຫລາຍບັນຫາທີ່ສັບສົນທີ່ສຸດ. ກ່ອນອື່ນໝົດ ອັນນີ້ແມ່ນຊັບພະຍາກອນທຳມະຊາດໃນໂລກນີ້ ມີຈຳນວນຈຳກັດ, ເພາະວ່າວັດຖຸເຊື້ອໄຟໃນພື້ນດິນ (ນ້ຳມັນ,ຖ່ານຫີນ,ອາຍແກັດ) ໃນໂລກ ນີ້ໃກ້ຈະໝົດແລ້ວ. ດຽວນີ້ຫລາຍປະເທດຂາດເຂີນຊັບພະຍາກອນທຳມະ ຊາດຕ່າງໆຢ່າງໜັກໜ່ວງ, ເຊັ່ນນ້ຳຈືດ, ອາກາດບໍລິສຸດ ແລະ ໂດຍສະເພາະແມ່ນທີ່ດິນ, ເຊິ່ງການຄົງຢູ່ຂອງຄົນຂຶ້ນໂດຍກົງກັບຊັບພະຍາກອນດັ່ງກ່າວນີ້ . ພ້ອມກັນກັບການເພີ່ມທະວີຈຳນວນພົນລະເມືອງໃນໂລກ, ພ້ອມກັນກັບ ການເພີ່ມທະວີການຜະລິດຢູ່ໃນໂລກ, ຊັບພະຍາກອນທຳມະຊາດໃນໂລກ ( ໂດຍສະເພາະໃນເງື່ອນໄຂນຳໃຊ້ຊັບພະຍາກອນດັ່ງກ່າວຢ່າງບໍ່ມີການກວດກາ)ນັບມື້ນັບໜ້ອຍລົງ, ເພາະວ່າຈຳນວນຂອງຊັບພະຍາກອນມີຈຳກັດ ເຊັ່ນດຽວກັນກັບຂະໜາດຂອງໜ່ວຍພິພົບຂອງພວກເຮົາ ກໍ່ມີການຈຳກັດຄືກັນ.

ໜຶ່ງໃນຈຳນວນບັນຫາທີ່ສັບສົນທີ່ສຸດຂອງໄລຍະປະຈຸບັນນີ້ ແມ່ນການເຮັດໃຫ້ທຳມະຊາດເປື້ອນເປິ ແລະ ການທຳລາຍບັນຍາກາດທຳມະຊາດແວດລ້ອມ. ໃນອາກາດເຈືອປົນໄປດ້ວຍທາດເຄມີ ທີ່ເປັນພິດ ຈາກເສດເຫລືອຂອງອຸດສາຫະກຳ ແລະ ຄວັນຂອງລົດ, ຈຳນວນໂອຊິດກາກບອນນິກ ເພີ່ມທະວີຂຶ້ນແລະຈຳນວນອົກຊີແຊນຫລຸດຜ່ອນລົງ. ໜ້າດິນຖືກ ພິດແລະຖືກທຳລາຍ,ສັດສາວາສິ່ງ ແລະ ພືດພັນຖືກດັບເຊື້ອ.

ມະຫາສະໝຸດໃນໂລກ ເກີດສະພາບມີໄພອື່ນອູ່. ນ້ຳໃນ ມະຫາສະໝຸດ ຮັບປະກັນລະບົບຊຸມທະພູມຂອງໜ່ວຍພິພົບ ໝາຍຄວາມວ່າ ກຳນົດ ອາກາດໃນໂລກໃນຂະໜາດໃຫຍ່. ລະຫວ່າງເຄິ່ງໜຶ່ງຂອງຈຳນວນອົກຊີແຊນ ທັງໝົດທີ່ທຸກສິ່ງ ມີຊີວິດໃນໂລກນີ້ ຫາຍໃຈເອົານັ້ນໄດ້ມາຈາກສິ່ງມີຊີວິດທີ່ດຳລົງຊີວິດໃນມະຫາສະໝຸດ. ມະຫາສະໝຸດເປັນແຫຼ່ງອາຫານທີ່ສຳຄັນທີ່ສຸດສ່ວນຫຼວງຫຼາຍຂອງໂລກເຊັ່ນ: ປາ, ສັດທະເລ, ຫອຍ ແລະ ອື່ນໆ. ຕົ້ນເຫດທີ່ເຮັດໃຫ້ນ້ຳທະເລ ແລະ ມະຫາສະໝຸດເປື້ອນເປິ້ນ ແມ່ນນ້ຳມັນດິບຈາກກຳປັ່ນທີ່ຫຼົ້ມແລ້ວຮົ່ວໄຫຼອອກໃສ່ທະເລ ,ຈາກ ອຸດສາຫະກຳນ້ຳມັນ ໃນທະເລ ແລະ ອື່ນໆເປັນຕົ້ນຕໍ. ຊັ້ນນ້ຳມັນຢູ່ເທິງໜ້ານ້ຳໄດ້ກີດຂວາງການ - ແລກປ່ຽນທາດອາຍລະຫວ່າງນ້ຳ ແລະ ບັນຍາກາດ, ທຳລາຍສິ່ງທີ່ມີຊີວິດ ຢູ່ພົ້ນ ມະຫາສະໝຸດ. ມະຫາສະໝຸດ ເປັນພິດຍ້ອນຖືກກຳມັນຕະພາບລັງສີ - ແລະ ທາດອາຍພິດ. ຜູ້ມີໂທດກຳອັນໃຫຍ່ຫຼວງທີ່ສ້າງໄພອັນຕະລາຍດັ່ງກ່າວນ້ອນມານັ້ນ ແມ່ນສະຫະລັດອາເມລິກາ. ກະຊວງປ້ອງກັນປະເທດຂອງສະຫະລັດອາເມລິກາໄດ້ຄົ້ນພົບວິທີຖືກໃນການຝັງທັບທີ່ມີທາດອາຍພິດທີ່ເຫຼືອ ໃຊ້ຈາກສະໄໝສົງຄາມ ແລະ ເສດເຫຼືອຈາກກຳມັນຕະພາບລັງສີນັ້ນ ລົງໄປສູ່ພົ້ນມະຫາສະໝຸດ. ອາດເປັນໄປໄດ້ທີ່ທາດດັ່ງກ່າວຈະຊຶມອອກສູ່ນ້ຳໃນມະຫາສະໝຸດ.

ຍ້ອນຜົນສະທ້ອນຂອງທາດເຄມີ, ກຳມັນຕະພາບລັງສີ ແລະ ທາດທີ່ຜົນຮ້າຍອື່ນໆທີ່ເຮັດໃຫ້ທຳມະຊາດແວດລ້ອມເປື້ອນເປິ້ນ ຈຳນວນຜູ້ເປັນ ພະຍາດມະເຮັງ ພະຍາດຫົວໃຈ,ເສັ້ນເລືອດ, ພະຍາດເສັ້ນປະສາດເພີ່ມທະວີ-ຂຶ້ນຢ່າງ ຫຼວງຫຼາຍ. ບາງທາດທີ່ເຮັດໃຫ້ບັນຍາກາດທຳມະຊາດແວດລ້ອມເປື້ອນເປິ້ນ ນຳໄປສູ່ການປ່ຽນແປງໃນການສືບເຊື້ອ, ພາໃຫ້ເກີດມີ ເດັກນ້ອຍເສຍອົງຄະແຕ່ເກີດພົ້ນ ເປັນຈຳນວນຫຼວງຫຼາຍ, ເກີດມີພະຍາດທາງກຳມະພັນ, ເກີດມີໄພນາບຂູ່ການດຳລົງຄົງຢູ່ຂອງມວນມະນຸດເທິງໜ່ວຍ ພິພົບ. ການທຳລາຍການດຸ່ນດ່ຽງທີ່ໄດ້ມີຂຶ້ນມາໂດຍຜ່ານ ຫຼາຍລ້ານປີແລ້ວ, ການທຳລາຍການສົມດຸນລະຫວ່າງຂະບວນວິວັດໃນທຳມະຊາດທີ່ແຕກຕ່າງ ກັນນັ້ນ ນຳໄປເຖິງອັນທີ່ຮຽກ ກັນເປັນວິກິດການດ້ານນິເວດວິທະຍາ *.

* ນິເວດວິທະຍາ ແມ່ນວິທະຍາສາດ (ຫຼືບັນດາວິທະຍາສາດແບບຄົບຊຸດ )

ຕໍ່ໜ້າວິທະຍາສາດມີໜ້າທີ່ຕັ້ງຂຶ້ນຄື ໜ້າທີ່ຄົ້ນຄວ້າ ແລະ ຄາດຄະເນທຸກໆຜົນທີ່ອາດຈະເກີດຂຶ້ນ ຍ້ອນການກະທົບຂອງຄົນຕໍ່ທຳມະຊາດ, ສຶກສາຄົ້ນຄວ້າ ແລະ ປະຕິບັດບັນດາວິທີການອັນເຖິງຖອງ ເພື່ອສະກັດກັ້ນຜົນຮ້າຍຂອງການກະທົບດັ່ງກ່າວ. ຄົນຕ້ອງມີທ່າທີແບບຖະໜຸຖະໜອມຕໍ່ທຳມະຊາດ, ດຳລົງຊີວິດຢ່າງສົມດູນກັບທຳມະຊາດ, ຕ້ອງຮັບຮູ້ ກົດເກນທຳມະຊາດໃຫ້ໄດ້ ດີເທົ່າໃດຍິ່ງດີເທົ່ານັ້ນ ແລະ ປະພຶດຕົວຢ່າງສອດຄ່ອງກັບກົດເກນດັ່ງກ່າວ.ບັນດາຊາວກອມມູນິດຖືວ່າ ຄວນອົບຮົມທຸກຄົນ, ໂດຍສະເພາະຄົນຮຸ່ນໃໝ່ ໃຫຍ່ ລູມນັ້ນ ຕາມຈິດໃຈດັ່ງກ່າວມານີ້.

ຖ້າຫາກຂະໜາດການກະທົບຂອງສັງຄົມຕໍ່ທຳມະຊາດນັ້ນ ຂຶ້ນກັບລະດັບ-ການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດແລ້ວ, ແມ່ນວ່າລັກສະນະ ຂອງການກະທົບນັ້ນກ່ອນອື່ນໝົດຖືກກຳນົດດ້ວຍລະບອບສັງຄົມ-ເສດຖະກິດ. ຕົ້ນເຫດຕົ້ນຕໍທີ່ພາໃຫ້ເກີດມີວິກິດການດ້ານນິເວດວິທະຍາ ນັ້ນແມ່ນລັດທິທຶນນິຍົມ. ເງິນຫຼາຍຮ້ອຍລ້ານໂດລາ ທີ່ພວກນາຍທຶນ ຜູກຂາດໄດ້ທຸ່ມເທເຂົ້າໃນການຜະລິດ ອາວຸດລ້າງຜານນັ້ນ ອາດສາມາດຕອບສະໜອງທຸກໆຄວາມ ຕ້ອງການໃນການດັດສ້າງແລະປົກປັກຮັກສາທຳມະຊາດ. ອາວຸດທັນສະໄໝບໍ່ພຽງແຕ່ສາມາດສ້າງເຄາະຮ້າຍ ແລະ ຄວາມເສົ້າສະຫຼົດໃຈໃຫ້ແກ່ພົນລະເມືອງໃນໂລກເທົ່ານັ້ນ, ແຕ່ຍັງສາມາດທຳລາຍຢ່າງຮາບຄາບທຸກສິ່ງທີ່ທຳມະຊາດ-ໄດ້ສ້າງຂຶ້ນມາໃນໄລຍະຫຼາຍພັນປີ ແລະ ຄົນໄດ້ສ້າງຂຶ້ນມາເພື່ອຄວາມສົມ-ບູນພູນສຸກຂອງຕົນໃນຊົ່ວຫຼາຍຮ້ອຍເຊັ່ນຄົນ. ເຊັ່ນຕົວຢ່າງສົງຄາມທີ່"ເປື້ອນ ເປີ" ທີ່ພວກຈັກກະພັດອາເມລິກາໄດ້ດຳເນີນຢູ່ຫວຽດນາມນັ້ນ ໄດ້ສ້າງ ຜົນຮ້າຍໃນການທຳລາຍທຳມະຊາດ, ທຳລາຍປ່າໄມ້ເຂດຮ້ອນໃນເນື້ອທີ່ ອັນກວ້າງໃຫຍ່ໄພສານ, ທຳລາຍກິດຈະການຈົນລະປະທານ, ຖົມຢາພິດ ເບື່ອເມົາໃສ່ບໍ່ນ້ຳ ແລະ ທົ່ງນາ.

ແຕ່ດົນນານມາແລ້ວ ທີ່ປະເທດລາວມີຊື່ເປັນ "ປະເທດລ້ານຊ້າງ". ແຕ່

---

ກ່ຽວກັບການພົວພັນເຊິ່ງກັນ ແລະ ກັນລະຫວ່າງສັງຄົມ ແລະ ທຳມະຊາດ.ວິກິດການດ້ານນິເວດວິທະຍາແມ່ນການທຳລາຍການດູນດ່ຽງລະຫວ່າງ ສັງຄົມ ແລະທຳມະຊາດຢ່າງກະທັນຫັນ, ແມ່ນວິກິດການໃນການພົວພັນເຊິ່ງກັນ ແລະ ກັນລະຫວ່າງສັງຄົມ ແລະ ທຳມະຊາດ.

ປະຈຸບັນນີ້ ຕາມການຕີລາຄາຂອງຜູ້ຊ່ຽວຊານແລ້ວ, ຈຳນວນຊ້າງໃນ ເມືອງລາວມີບໍ່ເກີນ ໔-໕ ພັນໂຕ. ອັນນີ້ເປັນຍ້ອນການລ່າຊ້າງຢ່າງຈິບຫາຍໃນໄລຍະລ່າເມືອງຂຶ້ນເປັນຕົ້ນຕໍ, ຍ້ອນການຫລຸດຜ່ອນເນື້ອທີ່ປ່າໄມ້, ຫມາຍຄວາມວ່າ ຫລຸດຜ່ອນອາຫານການກິນ. ການຖິ້ມລະເບີດຢ່າງປ່າເຖື່ອນຂອງ ເຮືອບິນອາເມລິກາ ທີ່ມີທັງລູກລະເບີດນາປານ ແລະ ຢາເບື່ອເຄມີ ໃນໄລຍະ ທີ່ສະຫະລັດອາເມລິກາທຳການຮຸກຮານປະເທດລາວນັ້ນ ໄດ້ສົ່ງຜົນສະທ້ອນ ອັນຫນັກຫນ່ວງໃສ່ການດຸ່ນດ່ຽງດ້ານນິເວດວິທະຍາ. ໃນປະຈຸບັນນີ້ ລັດໄດ້ ປະກາດປົກປັກຮັກສາຊ້າງທີ່ຍັງເຫລືອຢູ່ນັ້ນ, ມີການກໍ່ສ້າງເງື່ອນໄຂທີ່ອຳນວຍ - ຄວາມສະດວກໃຫ້ແກ່ຊ້າງໃນເຂດພູຜາປ່າດົງແລະບ່ອນທີ່ເປັນເຂດປ່າ ສະຫງວນຂອງປະເທດລາວ. ຢູ່ເຂດນີ້ມີຊ້າງຈຳນວນບໍ່ຫນ້ອຍ ທີ່ໄດ້ຮັບການລ້ຽງເກືອ ແລະ ຝຶກແອບຈາກຄົນ. ຊ້າງຊ່ວຍຊາວນາໃນການລາກໄມ້, ໃນການລຳລຽງເຂົ້າ ແລະ ສະບຽງອາຫານອື່ນໆ.

ການຖາງປ່າທີ່ມີບໍ່ມີຂອບເຂດ ທະວີຂຶ້ນ ຢູ່ໃນບັນດາປະເທດພວມພັດທະນານັ້ນເປັນເລື່ອງ ທີ່ຫນ້າວິຕົກກັງວົນຫລາຍ. ການສົ່ງວັດຖຸດິບ ທີ່ມີຄ່າ ( ໄມ້ເຂດຮ້ອນ ) ອອກໄປຕ່າງປະເທດ ໄດ້ນຳລາຍໄດ້ບໍ່ຫນ້ອຍມາສູ່ປະເທດ ທີ່ມີປ່າໄມ້ຢ່າງອຸດົມສົມບູນ. ໃນນັ້ນບັນດາປະເທດອາຊີ, ກ່ອນອື່ນຫມົດຄື ອິນໂດເນເຊຍ ແລະ ມາເລເຊຍ, ເປັນຜູ້ຂາຍໄມ້ອອກລະຫວ່າງ ໘໐% ຂອງ ຈຳນວນໄມ້ເນື້ອແຂງເຂດຮ້ອນໃນຕະຫລາດໂລກ. ແຕ່ຜົນກຳໄລເຫລົ່ານີ້ມັກ ຈະກາຍເປັນຄວາມເສຍຫາຍທີ່ຈະທົດແທນຄືນໄດ້ ຍາກ. ກ່ອນອື່ນຫມົດ, ອັນນີ້ແມ່ນບັນຫາການລ້າງຜານປ່າໄມ້ດ້ວຍບໍ່ລິສົດຕາເວັ້ນຕົກ. ໂດຍສະແຫວງຫາລາຍໄດ້ຈຳນວນຫລວງຫລາຍໃນການຂາຍໄມ້ແລ້ວ, ພວກເຂົາເຈົ້າບໍ່ເອົາໃຈໃສ່ຕໍ່ການປູກຕົ້ນໄມ້ຄືນໃຫມ່ຕາມທີ່ຄວນ. ຜົນກໍ່ຄື ໃນເຂດອັນກວ້າງຂວາງ ທີ່ຕັດໄມ້ອອກ ຫມົດແລ້ວນັ້ນຫນ້າດິນທີ່ອຸດົມສົມບູນຖືກເຊາະເຈື່ອນອອກ, ການດຸ່ນດ່ຽງດ້ານນິເວດວິທະຍາຂອງເຂດໃກ້ຄຽງ ຖືກທຳລາຍ. ດຽວນີ້ໃນບັນດາປະເທດອາຊີໃນຈຳນວນຕົ້ນໄມ້ທີ່ປູກໃຫມ່ຫ້າຕົ້ນນັ້ນ ມີຕົ້ນໄມ້ທີ່ຖືກຕັດອອກຫນຶ່ງຮ້ອຍຕົ້ນ. ສະພາບການທີ່ຫນ້າວິຕົກເປັນພິເສດນັ້ນໄດ້ເກີດຂຶ້ນຢູ່ ມາເລເຊຍ- ແລະ ຟີລິບປິນ.

ໃນການຂຸດຄົ້ນປ່າໄມ້ໃນປະເທດ, ລັດຖະບານສາທາລະນະລັດປະຊາທິ-

ປະໄຕປະຊາຊົນລາວ ໄດ້ເຮັດສິ່ງທີ່ບໍ່ມີເຈົ້າໜ້າທີ່ໃດ ໃນອະດີດສາມາດເຮັດໄດ້. ລັດໄດ້ທຳການຜູກຂາດການຄ້າໄມ້ອອກຕ່າງປະເທດ. ມີການໂຈມຕີ - ຢ່າງເດັດດ່ຽວຕໍ່ການກະທຳຕາມລຳພັງໃຈຂອງ "ເຖົ້າແກ່ໄມ້ທ່ອນ" ທີ່ໄດ້ຂົນໄມ້ອອກຈາກປະເທດ. ປະຈຸບັນນີ້ລັດດຳເນີນການໃນການຄ້າຂາອອກພຽງແຕ່ໄມ້ເລື່ອຍ, ຜະລິດຕະພັນສຳເລັດຮູບ ແລະ ຜະລິດຕະພັນປ່າໄມ້ເທົ່ານັ້ນ. ໃນທົ່ວປະເທດລາວ ມີການສ້າງຕັ້ງນິຄົມປ່າໄມ້ຂອງລັດ. ທຸກສິ່ງເຫຼົ່ານີ້ ແມ່ນ ວິທີການທີ່ສຳຄັນເພື່ອປົກປັກຮັກສາທຳມະຊາດໃນ ສ.ປ.ປ.ລ. ເພື່ອນຳໃຊ້ ຊັບສົມບັດຂອງຊາດຢ່າງ ສົມເຫດສົມຜົນ.

ພາຍໃຕ້ລະບອບສັງຄົມນິຍົມ ບັນ ຫາປົກປັກຮັກສາທຳມະຊາດແວດລ້ອມ- ແລະ ການໝູນໃຊ້ຊັບພະຍາກອນທຳມະຊາດຢ່າງສົມເຫດສົມຜົນນັ້ນ ຍັງແມ່ນບັນຫາທີ່ເລິກເຊິ່ງພໍສົມຄວນ. ແຕ່ທັດສະນະກ່ຽວກັບການແກ້ໄຂບັນຫານີ້ ແລະ ຄວາມອາດສາມາດຈະແກ້ໄຂບັນຫານີ້ໃນເງື່ອນໄຂສັງຄົມນິຍົມນັ້ນມີຄວາມແຕກຕ່າງດ້ານຫຼັກການກັບໃນລະບອບທຶນນິຍົມ.

ໃນບົດລາຍງານຂອງສູນກາງພັກຕໍ່ກອງປະຊຸມໃຫຍ່ຄັ້ງທີ ໒໕ ພ.ກ.ສ.ຊ ມີບາງຕອນກ່າວວ່າ: " ສາມາດໝູນໃຊ້ທຳມະຊາດ ໂດຍວິທີຕ່າງໆ. ສາມາດຈົ່ງບ່ອນວ່າງເປົ່າທີ່ບໍ່ມີຫຍັງເກີດໄດ້ ແລະ ເປັນສັດຕູຂອງຄົນໄວ້, ແລະ ປະຫວັດສາດຂອງໂລກມະນຸດ ໄດ້ເຫັນແບບຢ່າງດັ່ງນີ້ຈຳນວນບໍ່ໜ້ອຍແລ້ວ. ແຕ່ສາມາດ ແລະ ຈຳຕ້ອງ...ປົກປັກຮັກສາທຳມະຊາດ, ຊ່ວຍໃຫ້ທຳມະ ຊາດສະແດງກຳລັງແຮງແຫ່ງຊີວິດຂອງຕົນໄດ້ຢ່າງເຕັມສ່ວນກວ່າ. ມີຄວາມເວົ້າທີ່ງ່າຍດາຍ ແລະ ໃຜໆກໍຮູ້ກັນ, ຄື "ດິນແດນແຫ່ງດອກໄມ້". ນັ້ນຄື ດິນແດນບ່ອນທີ່ຄວາມຮູ້ ແລະ ບົດຮຽນຂອງຄົນ, ຄວາມສຳພັນ ແລະ ຄວາມຮັກຂອງພວກເຂົາເຈົ້າຕໍ່ທຳມະຊາດໄດ້ສ້າງສິ່ງທີ່ມະຫັດສະຈັນຢ່າງແທ້ຈິງ. ອັນນີ້ແມ່ນເສັ້ນທາງຂອງພວກເຮົາ, ຄືເສັ້ນທາງແບບສັງຄົມນິຍົມ" [1].

ຢູ່ສະຫະພາບໂຊວຽດ ການປົກປັກຮັກສາທຳມະຊາດ ໄດ້ບົ່ງໄວ້ໃນ ກົດໝາຍສະເພາະ. ລັດຖະທຳມະນູນແຫ່ງ ສ.ສ.ສ.ຊ. ໄດ້ລະບຸການປົກປັກ-ຮັກສາທຳມະຊາດໄວ້. ມາດຕາ ໑໘ ຂອງລັດຖະທຳມະນູນໄດ້ປະກາດວ່າ :

---

໑) ເອກະສານກອງປະຊຸມໃຫຍ່ຄັ້ງທີ ໒໕ ພ.ກ.ສ.ຊ, ໜ້າ ໕໙.

"ເພື່ອຜົນປະໂຫຍດຂອງຄົນຮຸ່ນນີ້ ແລະ ຄົນຮຸ່ນຫລັງ ຢູ່ ສ.ສ.ສ.ຊ. ໄດ້ມີວິທີການທີ່ຈຳເປັນເພື່ອປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ແລະ ໃຕ້ພື້ນດິນ, ແຫຼ່ງນ້ຳ, ພືດພັນ ແລະ ສັດສາວາສິ່ງຢ່າງມີພື້ນຖານວິທະຍາສາດ ແລະ ສົມເຫດສົມຜົນ, ເພື່ອຮັກສາຄວາມບໍລິສຸດຂອງອາກາດ ແລະນ້ຳ,ຮັບປະກັນການຟື້ນຟູຈັບສົມບັດທຳມະຊາດ ແລະ ປັບປຸງທຳມະຊາດແວດລ້ອມ "[໑].

ສະຫະພາບໂຊວຽດ ແລະ ໃນບັນດາປະເທດສັງຄົມນິຍົມອື່ນໆ ໄດ້ໃຊ້ງົບປະມານຢ່າງຫລວງຫລາຍເພື່ອປົກປັກຮັກສາທຳມະຊາດ. ເຊັ່ນຢູ່ ສ.ສ.ສ.ຊ ໃນຊຸມປີ ໑໙໗໖-໑໙໘໐ ລັດໄດ້ລົງທຶນເຖິງ ໑໑ ພັນລ້ານຮູບ ເພື່ອປົກປັກຮັກສາທຳມະຊາດໂດຍກົງ. ແຜນການງົບປະມານການລົງທຶນເພື່ອປົກປັກຮັກ ສາທຳມະຊາດຢູ່ ສ.ສ.ສ.ຊ. ໃນຊຸມປີ ໑໙໘໐ ຍິ່ງຫລາຍກວ່ານີ້ອີກ.

ປະຈຸບັນນີ້ ບັນຫາປົກປັກຮັກສາທຳມະຊາດແວດລ້ອມ ໄດ້ກາຍເປັນບັນຫາຂອງທົ່ວໂລກ. ອັນນີ້ໝາຍຄວາມວ່າ ບັນຫານີ້ໄດ້ມີລັກສະນະກວມລວມ ທົ່ວໂລກ, ແລະ ປະກົດອອກໃນທຸກຂົງເຂດຂອງໜ່ວຍພິພົບຂອງພວກເຮົາ ຄືທັງໃນບັນດາປະເທດທີ່ຂະຫຍາຍຕົວ, ທັງໃນບັນດາປະເທດດ້ອຍພັດທະນາ ທັງ-ໃນປະເທດທຶນນິຍົມ, ທັງໃນປະເທດສັງຄົມນິຍົມ. ການເຮັດໃຫ້ທຳມະ ຊາດແວດລ້ອມເປິເປື້ອນນັ້ນ ບໍ່ແມ່ນແຕ່ວຽກງານພາຍໃນຂອງບາງປະເທດອີກແລ້ວ ມັນນ້ຳ ແລະ ລົມແຜ່ພາຍຄວາມເປື້ອນເປິໄປທຸກຈອກທຸກແຈຂອງໜ່ວຍ ໂລກ ແລະຊາຍແດນລະຫວ່າງຊາດ ບໍ່ສາມາດກີດຂວາງມັນໄດ້. ເປັນການພຽງພໍທີ່ຈະເວົ້າວ່າ ສະຫະລັດອາເມລິກາເປັນຜູ້ ປ່ອຍເຄິ່ງໜຶ່ງຂອງເສດເຫລືອ ອຸດສາຫະກຳໃນໂລກນັ້ນອອກສູ່ບັນຍາກາດຫຸ້ມຫໍ່ໂລກ ແລະ ນ້ຳ. ບໍ່ມີປະເທດໃດໃນໂລກ (ແມ່ນກະທັ້ງປະເທດທີ່ບໍ່ມີອຸດສາຫະກຳຂະຫຍາຍຕົວສູງກໍ່ຕາມ )ຈະສາມາດຄົງຢູ່ຢ່າງປອດໄພ ຈາກສະພາບອາກາດ, ນ້ຳ, ທີ່ດິນ ເປິເປື້ອນ -ແບບກວມລວມທົ່ວໄປ. ຕົວຢ່າງໃນໄລຍະ ໑໐ ປີຫລັງມານີ້ ຢູ່ອ້ອມຂ້າງ ໝູ່ເກາະຮາວາຍ ຄວາມເປິເປື້ອນຂອງບັນຍາກາດຫຸ້ມຫໍ່ໂລກ ໄດ້ເພີ່ມທະວີ ຂຶ້ນກວ່າ ໓໐ ເປີເຊັນ, ເຖິງແມ່ນວ່າເທິງໝູ່ເກາະເຫລົ່ານີ້ບໍ່ມີວິສາຫະກິດ ອຸດສາຫະກຳຂະໜາດໃຫຍ່ກໍ່ຕາມ.

---

໑) ລັດຖະທຳມະນູນ(ກົດໝາຍພື້ນຖານ)ແຫ່ງສະຫະພາບສາທາລະນະ ລັດສັງຄົມນິຍົມໂຊວຽດ, ມົດສະກູ, ໑໙໗໘, ໜ້າ ໑໑.

ເພື່ອປົກປັກຮັກສາທຳມະຊາດ, ເພື່ອຮັບປະກັນຄວາມອາດສາມາດ ໃນການດຳລົງຊີວິດເທິງໜ່ວຍພິພົບໃຫ້ແກ່ຄົນຮຸ່ນໃໝ່ໃນອະນາຄົດ ຈຳຕ້ອງ ມີການສາມັກຄີການອອກແຮງຂອງປະຊາຊົນທຸກຄົນທຸກໆລັດ. ລັດຖະບານສະຫະພາບໂຊວຽດເປັນຜູ້ທຳອິດທີ່ໄດ້ຮຽກຮ້ອງໃຫ້ປະຊາຊົນໃຫ້ທຸກປະເທດຈົ່ງຮ່ວມມືກັນໃນການປົກປັກຮັກສາທຳມະຊາດແວດລ້ອມ. ສ.ສ.ສ.ຊ. ແລະ ບັນດາປະເທດສັງຄົມນິຍົມອື່ນໆປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນໂຄງການຕ່າງໆ ລະຫວ່າງລັດຖະບານໃນຂອບເຂດອົງການສະຫະປະຊາຊາດ, ໄດ້ເຮັດຫລາຍສິ່ງຫລາຍແນວ ເພື່ອປົກປັກຮັກສາທຳມະຊາດແວດລ້ອມ ບົນພື້ນຖານສັນຍາ ສອງຝ່າຍທີ່ເຊັນກັນ ລະຫວ່າງສະຫະພາບໂຊວຽດ ກັບຝະລັ່ງ, ຊູແອັດ ແລະ ບັນດາປະເທດອື່ນໆ. ສະຫະພາບໂຊວຽດເປັນຜູ້ສະເໜີຂໍ້ລິເລີ່ມໃຫ້ສະກັດກັ້ນການນຳໃຊ້ ພາຫະນະກະທົບຕໍ່ທຳມະຊາດແວດລ້ອມເພື່ອຈຸດປະສົງທາງດ້ານການທະຫານ ແລະ ການປໍລະປັກອື່ນໆ ແລະ ໄດ້ມີການຮັບຜ່ານສັນຍາທີ່ກ່ຽວຂ້ອງ.ຕາມຂໍ້ສະເໜີລິເລີ່ມ ຂອງ ສ.ສ.ສ.ຊ. ສະມັດຊາໃຫຍ່ຂອງ ສະຫະປະຊາຊາດ ໄດ້ຄົ້ນຄ້ວາບັນຫາກ່ຽວກັບໜ້າທີ່ຮັບຜິດຊອບຕໍ່ປະຫວັດສາດ ຂອງບັນດາລັດໃນການປົກປັກຮັກສາທຳມະຊາດໃນໂລກ ເພື່ອເປັນຜົນປະໂຫຍດໃຫ້ແກ່ຮຸ່ນຄົນໃນປະຈຸບັນ ແລະ ອະນາຄົດ. ສະມັດຊາໃຫຍ່ໄດ້ຄົ້ນຄ້ວາ ແລະຮັບເອົາຮ່າງມະຕິທີ່ຮັບຮູ້ໜ້າທີ່ຮັບຜິດຊອບດັ່ງນີ້ ເຊິ່ງແມ່ນ ສ.ສ.ສ.ຊ. ເປັນຜູ້ສະເໜີອອກ.

## ໔. ພົນລະເມືອງ ແລະບົດບາດຂອງມັນໃນຊີວິດສັງຄົມ

ພົນລະເມືອງ ແມ່ນການສັງລວມຄົນທີ່ດຳເນີນຊີວິດໃນປະເທດອັນແນ່ນອນ ແລະໃນໂລກເວົ້າລວມ. ມີວິທະຍາສາດສະເພາະທີ່ຄົ້ນຄວ້າບັນຫາ ພົນລະ-ເມືອງຄືວິຊາວ່າດ້ວຍຈຳນວນພົນລະເມືອງ. ປັດຊະຍາ ມາກ-ເລນິນ ກໍ່ ຄົ້ນຄ້ວາບັນຫານີ້ເຊັ່ນດຽວກັນ, ເພາະວ່າພົນລະເມືອງແມ່ນສ່ວນປະກອບທີ່ສຳຄັນທີ່ສຸດ ແລະ ຂາດບໍ່ໄດ້ຂອງທຸກໆລະບົບສັງຄົມ, ແມ່ນຜູ້ ປະດິດສ້າງຂະບວນວິວັດແຫ່ງປະຫວັດສາດ.

ບັນດານັກແນວຄິດນາຍທຶນ ໄດ້ຍົກທິດສະດີທີ່ວ່າ ການເພີ່ມທະວີຂອງ ພົນລະເມືອງແມ່ນປັດໄຈພື້ນຖານ ທີ່ຕັດສິນການຂະຫຍາຍຕົວຂອງສັງຄົມ. ສ່ວນບັນດານັກລັດທິມາກ-ເລນິນ ຖືວ່າ ການເພີ່ມທະວີພົນລະເມືອງບໍ່ກຳນົດການ ຂະຫຍາຍຕົວທີ່ມີລັກສະນະຕັດສິນຊີ້ຂາດຂອງສັງຄົມ. ຈະເອົາການເພີ່ມທະວີ ພົນລະເມືອງເພື່ອມາອະທິບາຍວ່າ ເປັນຫຍັງ ຈຶ່ງມີການປ່ຽນແທນລະບອບສັງຄົມຫນຶ່ງ ດ້ວຍລະບອບອື່ນ, ເຊິ່ງເປັນລະບອບການທີ່ແນ່ນອນພໍສົມຄວນ ນັ້ນແມ່ນບໍ່ໄດ້. ດັ່ງທີ່ຈະໄດ້ຊີ້ແຈງອອກໃນພາກຕໍ່ໆໄປວ່າ ການຂະຫຍາຍຕົວຂອງການຜະລິດວັດຖຸແມ່ນສິ່ງກຳນົດຂະບວນວິວັດແຫ່ງປະຫວັດສາດ.

ຫາກແຕ່ລັກສະນະພິເສດຂອງພົນລະເມືອງເຊັ່ນ ຈັງຫວະການເພີ່ມທະວີ, ຄວາມຫນາແຫນ້ນ *, ໂຄງປະກອບ ( ເຊິ່ງໃນນັ້ນລວມທັງໂຄງປະກອບ - ດ້ານອາຍຸ ) ຈະສົ່ງຜົນສະທ້ອນອັນແນ່ນອນຕໍ່ການຜະລິດ ແລະ ຕໍ່ດ້ານອື່ນ ໆ ຂອງຊີວິດສັງຄົມ. ການທີ່ພົນລະເມືອງຈຳນວນຫນ້ອຍດຳລົງຊີວິດຢູ່ໃນເນື້ອທີ່ ຈຳເປັນສຳລັບຊີວິດນັ້ນ ແມ່ນເງື່ອນໄຂທີ່ຈຳເປັນສຳລັບການກຳເນີດ ແລະຂະຫຍາຍຕົວຂອງສັງຄົມ. ລຳພັງແຕ່ຜູ້ດຽວເທົ່ານັ້ນ ຄົນກໍບໍ່ສາມາດຈະແຍກ ຕົວອອກຈາກທຳມະຊາດ, ບໍ່ສາມາດຕ້ານຢັນ ກັບກຳລັງ ທີ່ເປັນຫນ້າຢ້ານກົວຂອງທຳມະຊາດ.

---

*) ຄວາມຫນາແຫນ້ນຂອງພົນລະເມືອງ ( ຈຳນວນພົນລະເມືອງໃນຫນຶ່ງຕາລາງກິໂລແມັດ) ໃນບາງປະເທດຄື: ສ.ສ.ສ.ຊ. -໑໑,໗, ຈີນ -໘໐ ; ສະຫະລັດອາເມລິກາ -໒໓; ອິນເດຍ -໑໘໖; ມົງໂກລີ-໑; ລາວ-໑໔ . ຫນຶ່ງໃນບັນດາເຂດທີ່ມີພົນລະເມືອງຫນາແຫນ້ນກວ່າຫມູ່ໃນໂລກແມ່ນ ເກາະຊະວາ ຂອງອິນໂດເນເຊຍ. ຕາມຄວາມເຫັນຂອງນັກປາດອິນໂດເນເຊຍ - ແລ້ວ, ຖ້າຫາກຈັງຫວະ ການເພີ່ມທະວີຂອງພົນລະເມືອງ ຊະວາ ຮັກສາຄົງເດີມແລ້ວ, ຫລັງຈາກນີ້ ໒໕໐ ປີ ແມ່ນວ່າພົນລະເມືອງໃນເກາະນີ້ ຈຳຕ້ອງໄດ້ "...ນອນທັງຢືນ", ເພາະວ່າ ໄລ່ສະເລ່ຍໃສ່ຫົວຄົນແລ້ວ ຈະມີທີ່ ດິນພຽງແຕ່ ໑ ຕາລາງແມັດເທົ່ານັ້ນ.

ຈະຖືວ່າການເພີ່ມທະວີຂອງພົນລະເມືອງເປັນຂະບວນວິວັດ ແຫ່ງການແຜ່ຂະຫຍາຍຕາມແບບຊີວະສາດອ້ອຍຕ້ອຍ ຂອງມວນມະນຸດນັ້ນ ແມ່ນບໍ່ໄດ້. ມັນຂັດກັບລັກສະນະຂອງລະບອບສັງຄົມ, ອັນນີ້ໝາຍຄວາມວ່າ ບໍ່ແມ່ນເວລາ ໃດຄອບຄົວກໍ່ຈະມີລູກຕາມຈຳນວນເທົ່າທີ່ແມ່ຍິງສາມາດປະສູດອອກມາໄດ້, ແລະບໍ່ແມ່ນເດັກນ້ອຍທຸກຄົນທີ່ກຳເນີດອອກມາ ຈະເຕີບໃຫຍ່ຂະຫຍາຍຕົວຂຶ້ນໄດ້ .

ກ. ມາກ ເຄີຍເວົ້າວ່າ ໃນສັງຄົມ ບໍ່ມີກົດເກນນາມມະທຳກ່ຽວກັບພົນລະ - ເມືອງ ທີ່ໃຊ້ໄດ້ສຳລັບ ທຸກໆຍຸກສະໄໝປະຫວັດສາດ ແລະ ມີຜົນບັງຄັບ ໃຊ້ຢ່າງເທົ່າທຽມກັນຕັ້ງແຕ່ການກຳເນີດຂອງສັງຄົມ. ມາກ ໄດ້ສ້າງຕັ້ງກົດເກນກ່ຽວກັບພົນລະເມືອງໃນລັດທິທຶນນິຍົມ. ທາດແທ້ຂອງກົດເກນນີ້ຢູ່ບ່ອນວ່າ ລັດທິທຶນນິຍົມໄດ້ເລັ່ງລັດຈັງຫວະເພີ່ມຂຶ້ນຂອງຈຳນວນພົນລະເມືອງ ແລະພ້ອມກັນນັ້ນ ໄດ້ເຮັດໃຫ້ພົນລະເມືອງມີຈຳນວນເຫລືອເຟືອຢ່າງທຽບຖານໃນຮູບ ການເປັນກອງທັບຫວ່າງງານ, ເຊິ່ງເປັນພວກທີ່ບໍ່ມີທາງໃຊ້ແຮງງານຂອງຕົນ, ບໍ່ມີພາຫະນະເພື່ອດຳລົງຊີວິດ. ການຫມູນໃຊ້ເຕັກນິກແບບທຶນນິຍົມ, ການ ທັນການຜະລິດໃຫ້ເປັນລະບົບອັດຕະໂນມັດນັ້ນ ໄດ້ເຮັດໃຫ້ຜົນຮ້າຍຂອງກົດເກນນີ້ມີລັກສະນະຫນັກຫນ່ວງກວ່າເກົ່າ.

ພາຍໃຕ້ສັງຄົມນິຍົມ ບ່ອນທີ່ການຂະຫຍາຍຕົວຂອງການຜະລິດ ແລະ ສັງຄົມນັ້ນ ຮັບໃຊ້ໃຫ້ແກ່ຜົນປະໂຫຍດຂອງຄົນ, ບ່ອນທີ່ຄວາມເປັນຫ່ວງເປັນ ໃຍເຖິງການເພີ່ມທະວີຄວາມສົມບູນພູນສຸກຂອງປະຊາຊົນນັ້ນ ແມ່ນດ້ານຫນຶ່ງທີ່ຕັດຂາດບໍ່ໄດ້ຂອງນະໂຍບາຍຂອງລັດ, ກົດເກນກ່ຽວກັບພົນລະເມືອງຮັບປະກັນ-ໃຫ້ມີວຽກເຮັດງານທຳ ແບບເຕັມສ່ວນ ແລະ ຢ່າງສົມເຫດສົມຜົນສຳລັບ ພົນລະເມືອງຊາວຜູ້ອອກແຮງງານ, ໃຫ້ມີການເພີ່ມທະວີຈຳນວນພົນລະເມືອງ - ແລະ ການຈັດແບ່ງພົນລະເມືອງຢ່າງມີແຜນ.

ແນ່ນອນພາຍໃຕ້ສັງຄົມນິຍົມ ກໍ່ອາດຈະເກີດມີຄວາມຫຍຸ້ງຍາກທີ່ກ່ຽວຂອງກັບຂະບວນວິວັດຕ່າງໆແຫ່ງການປ່ຽນແປງດ້ານພົນລະເມືອງ. ໃນບາງ ປະເທດ ຈຳນວນເດັກເກີດໃຫມ່ໄດ້ຫລຸດລົງຢ່າງກະທັນຫັນ( ໂດຍສະເພາະໃນບັນດາຕົວເມືອງໃຫຍ່ ), ຈັງຫວະເພີ່ມທະວີຈຳນວນຂອງພົນລະເມືອງກໍ່ໄດ້ຫລຸດຜ່ອນລົງ. ການເຄື່ອນຍ້າຍພົນລະເມືອງໃນຂອບເຂດປະເທດ, ລວມທັງການເຄື່ອນຍ້າຍຈາກຊົນນະບົດເຂົ້າໄປຕົວເມືອງນັ້ນ ບໍ່ແມ່ນເວລາໃດກໍ່ສອດ ຄ່ອງ

ກັບຜົນປະໂຫຍດຂອງເສດຖະກິດແຫ່ງຊາດ ແລະ ຂອງສັງຄົມ.

ສັງຄົມ ສັງຄົມນິຍົມ ມີຄວາມອາດສາມາດຈະກະທົບຢ່າງມີເປົ້າໝາຍ ຕໍ່ຂະບວນວິວັດຂອງພົນລະເມືອງ. ມີເບ້ຍເພີ່ມສຳລັບຄອບຄົວທີ່ມີລູກຫລາຍຄົນ, ສຳລັບຜູ້ເປັນແມ່ ມີການກຳນົດເວລາພັກຜ່ອນຍາວນານ ໂດຍບໍ່ຕັດເງິນເດືອນ ໃນກໍລະນີຖືພາ ແລະ ປະສູດລູກ ແລະ ອີກຫລາຍສິ່ງຫລາຍແນວ. ເພື່ອ ຫັນທິດການເຄື່ອນຍ້າຍພົນລະເມືອງໄປເຂດທີ່ຈຳເປັນ ໃນປະເທດ ມີການ ວາງນະໂຍບາຍຕ່າງໆສຳລັບຊາວຜູ້ອອກແຮງງານ ໃນເຂດດັ່ງກ່າວ (ເຊັ່ນ ເງິນເດືອນສູງ, ອາຍຸອອກກິນເບ້ຍບຳນານຕ່ຳກວ່າ, ການພັກຜ່ອນປະຈຳປີ ດົນກວ່າ ແລະ ອື່ນໆ).

ໃນປະຈຸບັນນີ້ ການຂະຫຍາຍຕົວຂອງມວນມະນຸດໄດ້ກ້າວໄປສູ່ໄລຍະ ຊຶ່ງບັນຫາວ່າດ້ວຍຈຳນວນພົນລະເມືອງ ມີຄວາມໝາຍສຳຄັນ ແລະ ຮີບດ່ວນ ທີ່ສຸດ. ຄຽງຄູ່ກັບບັນຫາສະກັດກັ້ນໄພພິບັດຂອງສົງຄາມນິວເຄລຍ, ບັນຫາຍຸດຕິການຊ່ວງເສັ່ງປະກອບອາວຸດ, ບັນຫາປົກປັກຮັກສາ ທຳມະຊາດ ແວດລ້ອມ-ຈາກການພັງທະລາຍແລ້ວ, ບັນຫາວ່າດ້ວຍຈຳນວນພົນລະເມືອງໄດ້ກາຍເປັນບັນຫາທີ່ມີລັກສະນະກວມທົ່ວໂລກ.

ໃນໄລຍະ ຫລາຍສິບປີຫລັງມານີ້ ພົນລະເມືອງໃນໂລກ ໄດ້ເພີ່ມທະວີຂຶ້ນຢ່າງໄວວາຜິດປົກກະຕິ (ອັນທີ່ຮຽກກັນເປັນ "ການລະເບີດດ້ານຈຳນວນ ພົນລະເມືອງ" ). ຕາມການຄາດຄະເນວ່າ ໂລກມະນຸດໄດ້ລົງຕົວຢູ່ລະຫວ່າງ-ໜຶ່ງລ້ານປີມາແລ້ວ...ໃນນັ້ນ ໑໐໐ ພັນປີຕົ້ນຈຳນວນພົນລະເມືອງໃນໂລກບໍ່ເກີນເທົ່າໃດລ້ານຄົນ. ເລີ່ມແຕ່ຍຸກຂອງພວກເຮົາເປັນຕົ້ນມາ ຈົນເຖິງ ສະໄໝຕົ້ນຂອງສະຕະວັດທີ ໑໗ ພົນລະເມືອງຂອງໂລກ ຄ່ອຍເພີ່ມຂຶ້ນຢ່າງຊ້າໆ ແລະ ເກືອບບໍ່ເຖິງ ໕໐໐ ລ້ານຄົນ, ແຕ່ຫລັງຈາກນັ້ນໄດ້ເລີ່ມຕົ້ນເພີ່ມທະວີຂຶ້ນຢ່າງໄວວາ. ໃນໄລຍະ ໓ ສະຕະວັດເຄິ່ງ ຫລັງມານີ້ ພົນລະເມືອງ ໃນໂລກ ໄດ້ເພີ່ມທະວີຂຶ້ນຫ້າເທົ່າ. ປີ ໑໙໕໐ ໃນໂລກມີພົນລະເມືອງລະຫວ່າງ ໒,໕ ພັນລ້ານຄົນ. ໃນປະຈຸບັນນີ້ມີພົນລະເມືອງລະຫວ່າງ ໔,໕ ພັນ ລ້ານຄົນ. ອັນນີ້ໝາຍຄວາມວ່າ ໃນໄລຍະ ໓໐ ປີຫລັງມານີ້ ພົນລະເມືອງ ໃນໂລກໄດ້ເພີ່ມຂຶ້ນເກືອບສອງເທົ່າ. ການເພີ່ມທະວີຈຳນວນພົນລະເມືອງ ດຳເນີນໄປໃນຈັງຫວະອັນໄວດັ່ງນີ້ ແມ່ນຍ້ອນການຫລຸດຜ່ອນ ອັດຕາການຕາຍ-

( ໂດຍສະເພາະ ຂອງເດັກນ້ອຍ ) ຊຶ່ງດຳເນີນໄປ ໂດຍປາສະຈາກ ການຫລຸດຜ່ອນອັດຕາການເກີດຢ່າງເໝາະສົມ ໃນບັນດາປະເທດພວມພັດທະ ນາເປັນຕົ້ນຕໍ. ຕາມສະຖິຕິຂອງຜູ້ຊ່ຽວຊານຂອງອົງການສະຫະປະຊາຊາດ ແລ້ວເຖິງປີ ໒໐໐໐ ພົນລະເມືອງຂອງໂລກຈະເພີ່ມຂຶ້ນເຖິງ ໖,໒ ພັນລ້ານຄົນ.

ໃນປະເທດຕ່າງໆໃນໂລກ ສະພາບການດ້ານພົນລະເມືອງແຕກຕ່າງກັນ. ໃນຫລາຍປະເທດອຸດສາຫະກຳທີ່ຂະຫຍາຍຕົວ ໃນທະວີບເອີລົບ (ເຊັ່ນ ສ.ສ ຢ, ອົດສະຕາລີ, ສ.ປ.ຢ, ລຸກຊຳບວກ ແລະ ອື່ນໆ) ໃນໄລຍະ ຫລັງນີ້ ເນື່ອງຈາກວ່າອັດຕາການເກີດຕ່ຳເປັນພິເສດ ຈຶ່ງໄດ້ນຳໄປເຖິງການຍຸດຕິ - ການເພີ່ມທະວີຈຳນວນພົນລະເມືອງ ແລະ ຈຳນວນພົນລະເມືອງລວມຍັງຢູ່ລະດັບເກົ່າ ຫລືຫລຸດຜ່ອນລົງ. ພ້ອມກັນນັ້ນ ໙໐ % ຂອງການເພີ່ມທະວີຈຳນວນພົນລະເມືອງໃນໂລກ ແມ່ນຢູ່ໃນບັນດາປະເທດພວມພັດທະນາ. ເກີດມີການບໍ່ສົມດູນກັນລະຫວ່າງການເພີ່ມທະວີຈຳນວນພົນລະເມືອງຢ່າງຟົດເດືອດໃນ ປະເທດເຫລົ່ານີ້, ໝາຍຄວາມວ່າ ລະຫວ່າງຈຳນວນຄວາມຮຽກຮ້ອງຕ້ອງການດ້ານໜຶ່ງ, ກັບລະດັບການຜະລິດອີກດ້ານໜຶ່ງ. ເກີດມີບັນຫາຕ້ອງຮັບປະກັນບ່ອນຢູ່, ສະບຽງອາຫານ, ເຫງົ້າພະລັງງານ, ບ່ອນເຮັດວຽກ.

ແຕ່ຈະເປັນການຜິດພາດ ຖ້າຫາກຖືວ່າຄວາມອຶດຫິວທີ່ໄດ້ແຜ່ລາມ ຢ່າງກວ້າງຂວາງໃນໂລກນັ້ນແມ່ນຜົນຂອງການເພີ່ມທະວີຈຳນວນພົນລະເມືອງຢ່າງໄວ. ໃນດ້ານຕົ້ນຕໍ ອັນນີ້ແມ່ນຜົນຮ້າຍຂອງລັດທິລ່າເມືອງຂຶ້ນ, ແມ່ນ ໝາກຜົນຂອງນະໂຍບາຍທີ່ມີໂທດກຳຂອງບັນດາປະເທດຈັກກະພັດນິຍົມ ທີ່ໄດ້ທຸ່ມເທທຶນຢ່າງມະຫາສານເຂົ້າໃນການຊ່ວງເສັງປະກອບອາວຸດ. ການຂາດເຂີນສະບຽງອາຫານ ໃນບາງປະເທດພວມພັດທະນານັ້ນ ກ່ອນອື່ນໝົດກໍຍ້ອນວ່າ ໃນໄລຍະຫລາຍສິບປີ ພວກລ່າເມືອງຂຶ້ນໄດ້ມີເຈດຕະນາສະກັດກັ້ນການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດໃນບັນດາປະເທດດັ່ງກ່າວ, ກີດຂວາງການ ກໍ່ສ້າງອຸດສາຫະກຳຜະລິດກົນຈັກກະສິກຳ, ອຸດສາຫະກຳທີ່ຈຳເປັນສຳລັບເພີ່ມ-ທະວີຜະລິດຕະພັນກະສິກຳ. ລົບລ້າງຜົນຮ້າຍຕ່າງໆຂອງລັດທິລ່າເມືອງຂຶ້ນນັ້ນແມ່ນເງື່ອນໄຂທຳອິດເພື່ອເພີ່ມທະວີສະບຽງອາຫານໃນຫລາຍປະເທດອາຊີ , ອາຟຣິກກາ ແລະ ອາເມລິກາລາຕິນ. ຄວນຊອກແກ້ໄຂບັນຫາຢ່າງເຖິງຖອງຢູ່ໃນການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ວັດທະນະທຳ, ໃນການຮັບ

ປະກັນໃຫ້ພົນລະເມືອງຊາວຜູ້ອອກແຮງງານ ມີວຽກເຮັດງານທຳ, ແລະ ໃນການລຶບລ້າງຄວາມບໍ່ຮູ້ໜັງສື.

ໃນຂະນະດຽວກັນນັ້ນ ຄຽງຄູ່ກັບການຂະຫຍາຍຕົວທາງດ້ານເສດຖະ ກິດ ແລະ ວັດທະນະທຳແລ້ວ, ນະໂຍບາຍອັນຕັ້ງໜ້າ ວ່າດ້ວຍຈຳນວນພົນລະ - ເມືອງ, ການຫລຸດຜ່ອນຈັງຫວະຂອງການເພີ່ມທະວີພົນລະເມືອງນັ້ນ ກໍ່ມີ - ຄວາມໝາຍອັນແນ່ນອນ.

ໃນລະບົບແນວຄິດແບບນາຍທຶນ ມີຫລາຍທິດສະດີ ທີ່ບິດເບືອນທາດແທ້ - ແລະທິດທາງຂອງຂະບວນວິວັດຂອງຈຳນວນພົນລະເມືອງ. ໜຶ່ງໃນຈຳນວນ- ທິດສະດີຝືນວິທະຍາສາດດັ່ງກ່າວນີ້ ແມ່ນທິດສະດີມານທູສ ແລະ ທິດສະດີມານ ທູສໃໝ່. ນັກເສດຖະສາດນາຍທຶນຊາວອັງກິດ ຊື່ ມານທູສ (໑໗໖໖–໑໘໓໔) ໄດ້ຍົກແນວຄິດແບບປະຕິການອັນ ໂດຍກ່າວວ່າ ຄວາມທຸກຈົນ ແລະ ຄວາມທໍ ລະມານ ຂອງມະຫາຊົນນັ້ນ ເກີດຂຶ້ນມາຍ້ອນຈຳນວນພົນລະເມືອງເພີ່ມທະວີ- ຢ່າງໄວວາ ແລະ ໜ່ວຍໂລກໄດ້ອັ່ງລົ້ນໄປດ້ວຍຄົນ, ແຕ່ຫາກບໍ່ແມ່ນ ຍ້ອນ ການບີບບັ້ນເຫັງຂອງພວກກົດຂີ່ຂູດຮີດ. ຕາມຄວາມເຫັນຂອງມານທູສແລ້ວ, ຈາກນັ້ນຈຶ່ງສະຫລຸບໄດ້ວ່າ ແມ່ນກະໂຕຊາວຜູ້ອອກແຮງງານນັ້ນເອງ ເປັນ ຕົ້ນ ເຫດຂອງຄວາມທຸກຈົນ ເພາະວ່າພວກເຂົາເຈົ້າແຜ່ຂະຫຍາຍກັນໄວໂພດ. ປຶ້ມ "ທຶນ" ຂອງມາກ ແລະ ປຶ້ມ "ຊຶ້ນຊຸ້ມກຳມະກອນແລະທິດສະດີມານທູສ" ຂອງ ວ.ອີ.ເລນິນ ໄດ້ຊີ້ແຈງໃຫ້ເຫັນລັກສະນະໄຮ້ສາລະ ແລະ ປະຕິການຂອງທິດ ສະດີ ມານທູສ. ໂດຍເຜີຍແບທາດແທ້ຂອງທິດສະດີມານທູສ ອັງແກນໄດ້ຕີລາ ຄາມັນຄື "ທິດສະດີທີ່ຊົ່ວຮ້າຍແລະຕ່ຳຊ້າ...ແມ່ນການປຽດຫຍາມທຳມະຊາດ ແລະ ມວນມະນຸດຢ່າງຊຸບາດ" ໑).

ແນວຄິດມານທູສ ໃນຮູບແບບທີ່ດັດແກ້ໃໝ່ເລັກໜ້ອຍໄດ້ຮັບການແຜ່ ຂະ ຫຍາຍຢ່າງຫວ້າງຂວາງໃນສັງຄົມສາດນາຍທຶນສະໄໝໃໝ່. ບັນດາຜູ້ ສືບ ທອດຂອງມານທູສ ຢືນຢັນວ່າ ໃນປະຈຸບັນນີ້ ໜ່ວຍພິພົບຂອງພວກເຮົາ ບໍ່ສາ ມາດຈະລ້ຽງເກືອທຸກຄົນທີ່ດຳລົງຊີວິດໃນໂລກ, ສ່ວນໃນອະນາຄົດອັນບໍ່ໄກ ນີ້ ຄວາມອຶດຫິວໃນທົ່ວໂລກ ແລະ ການຕາຍຂອງຄົນເປັນຫລາຍຮ້ອຍລ້ານຄົນຈະ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໑, ໜ້າ ໕໖໕.

ເປັນສິ່ງທີ່ຫລີກເວັ້ນບໍ່ໄດ້. ເສັ້ນທາງແຫ່ງການກອບກູ້ເອົາມວນມະນຸດ ຈາກການອຶດຫິວນັ້ນ ພວກ ມານຕູສໃໝ່ ຖື ວ່າຕ້ອງເຮັດໝັນແບບບັງຄັບ (ການເຮັດໃຫ້ສູນເສຍຄວາມສາມາດ ໃນການເກີດລູກ ), ການຫລຸດຜ່ອນໃຫ້ການຊ່ວຍເຫລືອດ້ານການແພດແກ່ປະຊາຊົນ (ເມື່ອເພີ່ມທະວີອັດຕາການຕາຍ) , ການຢຸດເຊົາໃຫ້ການ ຊ່ວຍເຫລືອແກ່ປະເທດທີ່ດ້ອຍພັດທະນາ ແລະຈົນກະທັ້ງຕ້ອງດໍາເນີນສົງຄາມນິວເຄລຍ. ບັນດານັກລັດທິມາກ ໄດ້ກ່າວປະນາມທິດສະດີທີ່ໄຮ້ມະນຸດສະທໍາດັ່ງກ່າວນີ້ດ້ວຍຄວາມຄຽດແຄ້ນ ແລະ ນໍາເອົາການຕໍ່ສູ້ - ເພື່ອຄວາມກ້າວໜ້າທາງສັງຄົມ, ເພື່ອເພີ່ມທະວີອາຍຸຂອງຊີວິດຂອງຄົນໃຫ້ຍືນຍາວໄປຝືນກັບທິດສະດີມານຕູສ.

ລັດທິມາກ ບໍ່ປະຕິເສດຄວາມອາດສາມາດ ແລະ ຄວາມອາດຈະເປັນໄປໄດ້ຂອງການດັດສົມຂະບວນວິວັດຈໍານວນພົນລະເມືອງ ເຊິ່ງໃນນັ້ນລວມທັງລະດັບຂອງການເກີດ. ຖ້າຫາກພົນລະເມືອງໃນໂລກມີຄວາມມຸ່ງຫວັງແລ້ວ ແມ່ນວ່າພວກເຂົາເຈົ້າສາມາດກ້າວໄປເຖິງຄວາມໝັ້ນຄົງໃນດ້ານຈໍານວນພົນຂອງຕົນ. ຫາກແຕ່ວ່າ ການແກ້ໄຂຢ່າງຖືກຕ້ອງທຸກງບັນຫາດ້ານພົນລະເມືອງອາດສາມາດເປັນໄປໄດ້ພຽງແຕ່ບົນພື້ນຖານແຫ່ງການດັດສ້າງດ້ານເສດຖະກິດ-ສັງຄົມໃນຂັ້ນຮາກຖານ. ເມື່ອເວົ້າເຖິງບັນຫາພົນລະເມືອງແລ້ວ ຟ.ອັງແກນໄດ້ຂຽນວ່າ: "ຄວາມອາດສາມາດນາມມະທໍາໃນການເພີ່ມທະວີຈໍານວນພົນຂອງມວນມະນຸດ, ທີ່ຮຽກຮ້ອງໃຫ້ມີຄວາມຈໍາເປັນຕ້ອງກໍານົດຂອບເຂດຂອງ ການເພີ່ມທະວີດັ່ງກ່າວນີ້ມີຈິງແທ້. ແຕ່ຖ້າຫາກເມື່ອໃດສັງຄົມກອມມູນິດນິຍົມ ຈໍາຕ້ອງໄດ້ດັດສົມການເກີດຂອງຄົນເຊັ່ນດຽວກັບທີ່ໃນໄລຍະນັ້ນ ໄດ້ມີການດັດສົມການຜະລິດວັດຖຸແລ້ວນັ້ນ ແມ່ນວ່າມີແຕ່ສັງຄົມກອມມູນິດນິຍົມ ແລະ ພຽງ ແຕ່ສັງຄົມກອມມູນິດນິຍົມເທົ່ານັ້ນ ສາມາດປະຕິບັດການດັດສົມນີ້ໂດຍບໍ່ມີ ຄວາມຫຍຸ້ງຍາກໃດເລີຍ" ໑) .

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ. ເຫລັ້ມທີ ມ໕, ໜ້າ ໑໘໔.

# ພາກທີ ສາມ

## ຮູບຖານຈັດຕັ້ງສັງຄົມ-ເສດຖະກິດ.

### ໑. ຈຸດພິເສດພື້ນຖານ ຂອງຮູບຖານຈັດຕັ້ງ ສັງຄົມເສດຖະກິດ

ນັບຕັ້ງແຕ່ໄດ້ສະຖາປະນາຂຶ້ນມາແລ້ວ ສັງຄົມໄດ້ຮັບການຂະຫຍາຍຕົວ - ແລະ ປັບປຸງໃຫ້ສົມບູນຂຶ້ນຢູ່ເປັນປະຈຳ. ມັນໄດ້ເດີນຜ່ານໄລຍະອັນແນ່ ນອນໃນການຂະຫຍາຍຕົວ. ພ້ອມກັນນັ້ນ ຫຼາຍໆໄລຍະດັ່ງກ່າວ ມີການພົວພັນ ຢ່າງແໜ້ນແຟ້ນ ແລະ ໃນເວລາດຽວກັນນັ້ນ ມີຄວາມແຕກຕ່າງກັນ ໃນດ້ານ ຄຸນນະພາບ. ແຕ່ລະໄລຍະຕໍ່ໆໄປຂອງການຂະຫຍາຍຕົວດ້ານສັງຄົມນັ້ນ ມີລັກສະນະສົມບູນ ແລະ ກ້າວໜ້າກວ່າໄລຍະທີ່ຄົງຢູ່ໃນໄລຍະກ່ອນນັ້ນ. ປັດຊະ ຍາມາກ-ເລນິນ ໃຊ້ຄວາມຮູ້ກ່ຽວກັບ "ຮູບຖານຈັດຕັ້ງສັງຄົມ-ເສດຖະກິດ" ເພື່ອໝາຍເຖິງແຕ່ລະໄລຍະໃນການຂະຫຍາຍຕົວຂອງສັງຄົມ, ທີ່ມີລະບອບ ເສດຖະກິດອັນແນ່ນອນດ້ານປະຫວັດສາດ ແລະ ໂຄງນົບດ້ານການເມືອງແລະ ກົດໝາຍທີ່ສອດຄ່ອງກັບລະບອບດັ່ງກ່າວ, ພ້ອມທັງບັນດາຮູບແບບແຫ່ງສະຕິສັງຄົມ. ມີຫ້າຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ທີ່ແຕກຕ່າງກັນຄື: ປະຖົມບູ - ຮານ, ຂ້າທາດ, ສັກດີນາ, ທຶນນິຍົມ, ກອມມູນິດນິຍົມ. ຮູບຖານກອມມູນິດນິຍົມ ລວມມີສອງໄລຍະພື້ນຖານຄືສັງຄົມນິຍົມ ແລະ ກອມມູນິດນິຍົມ.ກ.ມາກໄດ້ໃຫ້ລັກສະນະຂອງຮູບຖານຈັດຕັ້ງສັງຄົມ- ເສດຖະກິດນັ້ນເປັນຄືສັງຄົມ" ທີ່ຢູ່ໃນໄລຍະອັນແນ່ນອນຂອງການຂະຫຍາຍຕົວດ້ານປະຫວັດສາດ ຄືສັງຄົມທີ່ ມີລັກສະນະສະເພາະຂອງຕົນ". ໑).

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນເຫຼັ້ມທີ ໖, ໜ້າ ໔໔໘.

ວິທີການຜະລິດຊັບສິນວັດຖຸ ທີ່ແນ່ນອນປະກອບເປັນພື້ນຖານ ຂອງແຕ່ ລະຮູບຖານຈັດຕັ້ງສັງຄົມ-ເສດຖະກິດ.

ເປັນສິ່ງທຳອິດທີ່ລັດທິມາກ-ເລນິນ ໄດ້ພິສູດວ່າ ການຜະລິດວັດຖຸ ແມ່ນພື້ນຖານແຫ່ງການຂະຫຍາຍຕົວຂອງສັງຄົມນັ້ນ ກໍດ້ວຍເຫດວ່າ ພຽງແຕ່ຍ້ອນມີການເຄື່ອນໄຫວອອກແຮງງານເທົ່ານັ້ນ ຄົນຈຶ່ງໄດ້ແຍກອອກຈາກໂລກຂອງສັດ ແລະ ໄດ້ກາຍເປັນສິ່ງມີຊີວິດໃນສັງຄົມ. ແຮງງານແມ່ນຕົ້ນກຳເນີດຕົ້ນຕໍ ໃຫ້ແກ່ທຸກໆຊັບສິນວັດຖຸທີ່ຈຳເປັນສຳລັບການດຳລົງຊີວິດ. ສິ່ງທີ່ຄົນໄດ້ຮັບຈາກທຳມະຊາດເປັນແບບສຳເລັດຮູບ (ເຊັ່ນໝາກໄມ້, ຫຍ້າ ແລະ ຮາກໄມ້ທີ່ ກິນໄດ້ ແລະ ອື່ນໆ ) ນັ້ນບໍ່ພຽງພໍສຳລັບການດຳລົງຊີວິດ. ຄົນຕ້ອງມີແຫລ່ງສະບຽງອາຫານແບບປະຈຳ, ຕ້ອງນຸ່ງຫົ່ມ, ມີເຮືອນຢູ່ກ່ອນທີ່ຈະເຮັດວຽກງານ-ການເມືອງ, ວິທະຍາສາດ, ສິລະປະກຳ ແລະ ການເຄື່ອນໄຫວອື່ນໆ . ແຕ່ເພື່ອໃຫ້ມີທຸກສິ່ງເຫລົ່ານີ້ ຕ້ອງໄດ້ອອກແຮງງານເປັນປະຈຳ.

ເຫດຜົນ ຕົ້ນຕໍທີ່ພາໃຫ້ເກີດມີການປ່ຽນແປງໃນສັງຄົມ, ການປ່ຽນ ແທນລະບອບສັງຄົມໜຶ່ງດ້ວຍລະບອບສັງຄົມອື່ນນັ້ນ ແມ່ນການຂະຫຍາຍຕົວ ແລະການປ່ຽນແທນວິທີການຜະລິດ. ວິທີການຜະລິດແບບປະຖົມບູຮານ ຖືກປ່ຽນ - ແທນດ້ວຍວິທີການຜະລິດແບບຂ້າທາດ, ຫລັງຈາກນັ້ນກໍແມ່ນແບບສັກດີນາ , ແບບທຶນນິຍົມ. ມາແທນທີ່ວິທີການຜະລິດແບບທຶນນິຍົມນັ້ນ ມີວິທີການຜະລິດ ທີ່ກ້າວໜ້າກວ່າ ຄືແບບກອມມູນິດນິຍົມ.

ວິທີການຜະລິດແມ່ນຄວາມເປັນເອກະພາບລະຫວ່າງສອງດ້ານຄື: ລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດ.

ກຳລັງແຫ່ງການຜະລິດ ແມ່ນຫຍັງ ?

ແຕ່ໃນສະໄໝສັງຄົມປະຖົມບູຮານ, ໃນເມື່ອຄົນຫາກິນດ້ວຍການລ່າສັດ, ຕຶກປາ ແລະ ຫາກໍເລີ່ມຕົ້ນເຮັດການປູກຝັງນັ້ນ, ພວກເຂົາເຈົ້າໄດ້ນຳໃຊ້ - ເຄື່ອງມືອອກແຮງງານທີ່ງ່າຍດາຍທີ່ສຸດເຊັ່ນ: ຂວານ ທີ່ເຮັດດ້ວຍຫີນ, ມີດ, ແຫ ແລະ ອື່ນໆ. ຕາມທີ່ສັງຄົມມະນຸດໄດ້ຂະຫຍາຍຕົວຂຶ້ນມາ, ແລະ ໂດຍ-ສະເພາະໃນສະໄໝປະຈຸບັນນີ້, ຄົນໄດ້ ນຳໃຊ້ເຄື່ອງຈັກ ເຄື່ອງລາງ , ເຄື່ອງວັດແທກ, ສາຍພານອັດຕະໂນມັດ ແລະ ອື່ນໆ ອັນນັບມື້ນັບສັບສົນ ຂຶ້ນເຂົ້າໃນການອອກແຮງງານຂອງຕົນ. ດັ່ງນີ້ ໜຶ່ງໃນຈຳນວນສ່ວນ ປະກອບ

ຂອງກຳລັງແຫ່ງການຜະລິດນັ້ນ ແມ່ນເຄື່ອງມືການອອກແຮງງານ.

ແຕ່ຢູ່ລຳພັງແລ້ວ ເຄື່ອງມືການອອກແຮງງານບໍ່ອາດຈະເຄື່ອນໄຫວໄດ້ - ໂດຍບໍ່ມີຄົນ. ມີແຕ່ຄົນເທົ່ານັ້ນ ຈຶ່ງສາມາດນຳໃຊ້ເຄື່ອງມືອອກແຮງງານແລະ ຈັດຕັ້ງການຜະລິດວັດຖຸ. ເພື່ອດຳເນີນການຜະລິດ ນອກຈາກເຄື່ອງມື ອອກ ແຮງງານແລ້ວ ຄົນຍັງຫມູນໃຊ້ເປົ້າຫມາຍອອກແຮງງານ, ອາຄານ, ທີ່ດິນ, ຄອງເຫມືອງ, ພາຫະນະອື່ນສິ່ງ. ການສັງລວມທຸກໆສ່ວນປະກອບເຫລົ່ານີ້ປະ ກອບເປັນພາຫະນະການຜະລິດ. ການຜະລິດແມ່ນຂະບວນວິວັດ ເຊິ່ງໃນ ນັ້ນ ຄົນທີ່ມີຄວາມຊຳນິຊຳນານດ້ານວິຊາສະເພາະ-ເຕັກນິກນັ້ນທ້ອນໂຮມແຮງງານ ຂອງຕົນເຂົ້າກັບພາຫະນະການ ຜະລິດ, ແລະ ປະດິດສ້າງຊັບສິນວັດຖຸ ທີ່ຈຳ ເປັນສຳລັບການດຳລົງຊີວິດຂອງຄົນ.

ດ້ວຍເຫດນັ້ນ ຄົນແມ່ນສ່ວນປະກອບຕົ້ນຕໍຂອງກຳລັງແຫ່ງການຜະລິດ.ວ. ອີ.ເລນິນ ເຄີຍເວົ້າວ່າ: "ກຳລັງແຫ່ງການຜະລິດທີ່ຫນຶ່ງຂອງທົ່ວທັງມວນມະ ນຸດນັ້ນແມ່ນກຳມະກອນ, ຊາວຜູ້ອອກແຮງງານ." ໑)

ດັ່ງນີ້, ກຳລັງແຫ່ງການຜະລິດໄດ້ສັງລວມເອົາ ສອງສ່ວນປະກອບ ທີ່ຕັດ ແຍກອອກຈາກກັນບໍ່ໄດ້, ຄື: ພາຫະນະການຜະລິດ ເຊິ່ງແມ່ນຄົນເປັນຜູ້ ປະ ດິດສ້າງຂຶ້ນມາ ແລະ ກະໂຕຄົນເອງພ້ອມດ້ວຍບົດຮຽນດ້ານການຜະລິດ ແລະ ຄວາມຊຳນິຊຳນານ ໃນການອອກແຮງງານ, ພ້ອມດ້ວຍລະດັບວິຊາສະເພາະ ແລະ ຄວາມຮູ້ຂອງພວກເຂົາເຈົ້າ. ແມ່ນກະໂຕຄົນນັ້ນເອງເປັນຜູ້ດຳເນີນ - ການຜະລິດຊັບສິນ ແລະ ພາຫະນະໃນການດຳລົງຊີວິດ. ກຳລັງແຫ່ງການຜະ ລິດສະແດງເຖິງການພົວພັນຂອງຄົນຕໍ່ທຳມະຊາດ, ລະດັບທີ່ຄົນຍຶດເອົາກຳລັງ ແຮງ ແລະ ຄວາມຮັ່ງມີຂອງທຳມະຊາດ. ໂດຍຫມູນໃຊ້ກຳລັງແຫ່ງການ ຜະ ລິດຄົນດຳເນີນການແລກປ່ຽນທາດຂອງຕົນກັບທຳມະຊາດ, ການແລກປ່ຽນດັ່ງ ກ່າວນີ້ແມ່ນເງື່ອນໄຂທຳມະຊາດ ແລະ ຈຳເປັນສຳລັບ ການດຳລົງຢູ່ຂອງຄົນ.

ດ້ານທີ່ສອງຂອງວິທີການຜະລິດ ແມ່ນການພົວພັນແຫ່ງການຜະລິດ. ແຮງ ງານ ເວລາໃດກໍ່ແມ່ນແຮງງານສັງຄົມ. ທ່າມກາງການເຄື່ອນໄຫວອອກແຮງ ງານ ຄົນຕ້ອງມີທ່າທີ ແລະ ການພົວພັນອັນແນ່ນອນ, ເຊິ່ງກັນ ແລະ ກັນ .

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດເຫລັ້ມທີ ๓໘, ຫນ້າ ๓໕๓.

ດັ່ງນີ້ ການພົວພັນແຫ່ງການຜະລິດ ແມ່ນການພົວພັນດ້ານເສດຖະກິດ ທີ່ໄດ້ ມີຂຶ້ນ ລະຫວ່າງຄົນໃນຂະບວນວິວັດ ແຫ່ງການຜະລິດຊັບສິນວັດຖຸ. ສ່ວນ ປະກອບພື້ນຖານຂອງການພົວພັນແຫ່ງການຜະລິດນັ້ນ ແມ່ນຮູບແບບຍຶດຖືກຳມະສິດກ່ຽວກັບພາຫະນະການຜະລິດ. ພາຫະນະການຜະລິດຢູ່ໃນກຳມະສິດຂອງໃຜນັ້ນ ປະກອບເປັນທາດແທ້ຂອງການພົວພັນແຫ່ງການຜະລິດ. ສ່ວນປະກອບ ຂອງການພົວພັນແຫ່ງການຜະລິດນັ້ນ ຍັງແມ່ນການພົວພັນເຊິ່ງກັນ ແລະ ກັນ ລະຫວ່າງບັນດາຊົນຊັ້ນ, ກຸ່ມຄົນໃນສັງຄົມ. ລັກສະນະຂອງການພົວພັນດັ່ງ ກ່າວແມ່ນແບບເພື່ອນມິດຫລືແບບປໍລະປັກກັນນັ້ນ ຕັດສິນດ້ວຍລັກສະນະຂອງກຳມະ-ສິດກ່ຽວກັບພາຫະນະການຜະລິດ ແມ່ນເປັນຂອງສັງຄົມຫລືຂອງເອກະເທດ.

ໃນການພົວພັນແຫ່ງການຜະລິດ ລວມມີທັງຮູບແບບຂອງການແຈກຢາຍຊັບສິນວັດຖຸ. ມັນຂຶ້ນກັບລັກສະນະຂອງກຳມະສິດ, ຂຶ້ນກັບວ່າພາຫະນະການ ຜະລິດນັ້ນຢູ່ໃນກຳມືຂອງໃຜ. ພາຍໃຕ້ກຳມະສິດເອກະເທດກ່ຽວກັບເຄື່ອງມືການອອກແຮງງານແລ້ວ ເຈົ້າຂອງຂອງພາຫະນະການຜະລິດໄດ້ຮັບສ່ວນແບ່ງຫຼາຍກວ່າ, ສ່ວນໃຫຍ່ໃນຈຳນວນສິນຄ້າທີ່ຜະລິດອອກມາໄດ້, ເຖິງແມ່ນວ່າເຂົາບໍ່ໄດ້ປະກອບສ່ວນໂດຍກົງເຂົ້າໃນການຜະລິດ. ສ່ວນຜູ້ທີ່ບໍ່ມີພາຫະນະການ ຜະລິດນັ້ນ ຂາຍແຮງງານຂອງຕົນ ແລະ ໄດ້ຮັບພຽງຈຳນວນສ່ວນໜ້ອຍຂອງ - ຄວາມຮັ່ງມີສັງຄົມ.

ໃນເງື່ອນໄຂ ສັງຄົມນິຍົມ ທຸກໆຊັບສິນວັດຖຸທີ່ຜະລິດອອກມານັ້ນແມ່ນຂອງຊາວຜູ້ອອກແຮງງານເອງ. ຢູ່ນີ້ຫລັກການແບ່ງປັນແບບສັງຄົມນິຍົມມີຜົນປະຕິ-ບັດຢູ່ຄື: "ເຮັດຕາມຄວາມສາມາດ ຊົມໃຊ້ຕາມແຮງງານ ".

ໂດຍສອດຄ່ອງກັບໄລຍະອັນແນ່ນອນໃນການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ ໃນປະຫວັດສາດຂອງສັງຄົມ ໄດ້ມີການພົວພັນແຫ່ງການຜະລິດຫ້າປະເພດ: ຄື ແບບປະຖົມບູຮານ, ແບບຂ້າທາດ, ແບບສັກດີນາ, ແບບທຶນນິຍົມ ແລະ ແບບກອມມູນິດນິຍົມ.

ການພົວພັນແຫ່ງການຜະລິດແບບປະຖົມບູຮານ ໄດ້ສ້າງຂຶ້ນບົນພື້ນຖານລະດັບຕ່ຳທີ່ສຸດໃນການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ. ໃນນັ້ນຄົນອອກແຮງງານຮ່ວມກັນ ແລະ ພາຫະນະການຜະລິດແມ່ນຂອງທົ່ວທັງສັງຄົມ. ມີແຕ່ແບບນີ້ຈຶ່ງສາມາດທົນທານໄດ້ໃນການຕໍ່ສູ້ເພື່ອການຄົງຢູ່. ໃນສັງຄົມປະຖົມ ບູ

ຣານ ການແຈກຢາຍເປັນແບບສະໝ່ຳສະເໝີກັນ; ທຸກສິ່ງທີ່ໄດ້ມາຈາກການລ່າເນື້ອ, ໃນປ່າ, ໃນທົ່ງນານັ້ນ ລ້ວນແຕ່ແບ່ງກັນຢ່າງສະໝ່ຳສະເໝີ.

ການພົວພັນແຫ່ງການຜະລິດແບບປະຖົມບູຣານ ໄດ້ຖືກປ່ຽນແທນດ້ວຍການພົວພັນແຫ່ງການຜະລິດແບບຂ້າທາດ. ໃນນັ້ນເຄື່ອງມືການອອກແຮງງານແລະກະໂຕຄົນຜູ້ອອກແຮງງານ (ຂ້າທາດ) ລ້ວນແຕ່ແມ່ນຂອງເຈົ້າທາດ, ໝາຍຄວາມວ່າ ຢູ່ໃນກຳມະສິດເອກະເທດ. ຂ້າທາດພຽງແຕ່ໄດ້ຮັບສ່ວນທີ່ ຈຳເປັນສຳລັບການຮັກສາຊີວິດຂອງເຂົາເທົ່ານັ້ນ. ການພົວພັນລະຫວ່າງຄົນ ໄດ້ສ້າງຂຶ້ນບົນພື້ນຖານແຫ່ງການປົກຄອງ ແລະ ການກົດຂີ່ຂົ່ມເຫັງ. ຂ້າທາດຂຶ້ນກັບເຈົ້າຂອງຂອງຕົນ ຄືເຈົ້າທາດນັ້ນຢ່າງເຕັມສ່ວນ.

ສັງຄົມສັກດີນາຍັງປົກປັກຮັກສາກຳມະສິດອັນເຕັມສ່ວນຂອງສັກດີນາ ຕໍ່ພາຫະນະການຜະລິດ, ກ່ອນອື່ນໝົດ ແມ່ນຕໍ່ທີ່ດິນ ແລະ ກຳມະສິດບໍ່ເຕັມສ່ວນຕໍ່ຄົນຜູ້ອອກແຮງງານ ຄືຕໍ່ຊາວນາທີ່ຢູ່ໃນການເປັນທາດຂອງສັກດີນາ. ສັກດີນານຳໃຊ້ແຮງງານຂອງຊາວນາ, ສາມາດຂາຍ ຫລືຊື້ຊາວນາໄດ້. ແຕ່ສັກດີ-ນາບໍ່ສາມາດຈະບັນຊາຊີວິດຂອງຊາວນາໄດ້. ໃນເງື່ອນໄຂດັ່ງນີ້ ຊາວນາ ມີເສດຖະກິດສ່ວນຕົວຂະໜາດນ້ອຍ. ພາຍຫລັງທີ່ໄດ້ປະຕິບັດທຸກໆພັນທະຕໍ່ເຈົ້າສັກດີນາແລ້ວ, ຊາວນາອອກແຮງງານເພື່ອຕົນເອງ. ຊາວນາໄດ້ເລີ່ມຕົ້ນສົນໃຈບາງສ່ວນໃນການອອກແຮງງານ, ໃນການປັບປຸງເຄື່ອງມືການຜະລິດ.

ການພົວພັນແຫ່ງການຜະລິດແບບທຶນນິຍົມ ຍັງປົກປັກຮັກສາກຳມະສິດສ່ວນຕົວຕໍ່ພາຫະນະການຜະລິດ. ໂຮງຈັກໂຮງງານ ແລະ ພາຫະນະການຜະລິດ-ອື່ນໆ ແມ່ນຂອງນາຍທຶນ, ກຳມະສິດນາຍທຶນມີຖານະຄອບຄອງ. ຊົນຊັ້ນ ກຳມາຊີບ ມີອິດສະຫລະພາບທາງດ້ານກົດໝາຍ. ແຕ່ອິດສະຫລະພາບນີ້ ເປັນພຽງອິດສະຫລະພາບຮູບນອກເທົ່ານັ້ນ. ເພື່ອບໍ່ອຶດເຂົ້າຕາຍ, ຊົນຊັ້ນ ກຳມາຊີບ ຂາຍກຳລັງແຮງງານຂອງຕົນໃຫ້ນາຍທຶນ. ກຳມະກອນຖືກນາຍທຶນຂູດຮີດ, ສ້າງກຳໄລໃຫ້ນາຍທຶນ. ການຂູດຮີດດັ່ງນີ້ໄດ້ນຳໄປເຖິງການຕໍ່ສູ້ຢ່າງດຸເດືອດລະຫວ່າງນາຍທຶນ ແລະ ຊົນຊັ້ນກຳມາຊີບ.

ໃນການພົວພັນ ແຫ່ງການຜະລິດ ແບບກອມມູນິດນິຍົມ ມີສອງປະເພດທີ່ສອດຄ່ອງກັບສອງໄລຍະຂອງກອມມູນິດນິຍົມ. ຄືສັງຄົມນິຍົມ ແລະ ກອມມູນິດນິຍົມທີ່ສົມບູນ. ນັ້ນຄືການພົວພັນແຫ່ງການຜະລິດແບບສັງຄົມນິຍົມ ແລະ ແບບ

ກອມມູນິດນິຍົມ.

ສຳລັບການພົວພັນແຫ່ງການຜະລິດແບບສັງຄົມນິຍົມແລ້ວ ກຳມະສິດສັງຄົມຕໍ່ພາຫະນະການຜະລິດ, ການປາສະຈາກການຂູດຮີດ, ມິດຕະພາບ ແລະ - ການຮ່ວມມືລະຫວ່າງບັນດາຊົນຊັ້ນ ທີ່ບໍ່ປໍລະປັກກັນນັ້ນ ແມ່ນຈຸດພິເສດຂອງມັນ. ການແຈກຢາຍຊັບສິນວັດຖຸນັ້ນ ດຳເນີນໄປຕາມຈຳນວນ ແລະ ຄຸນນະ ພາບຂອງແຮງງານ ທີ່ຜູ້ອອກແຮງງານໄດ້ປະກອບສ່ວນ. ດ້ວຍເຫດນັ້ນ ທຸກຄົນຈຶ່ງມີຄວາມສົນໃຈໃນໝາກຜົນຂອງວຽກງານຂອງຕົນ. ໃນການຂ້າມຜ່ານໄປ ສູ່ກອມມູນິດນິຍົມນັ້ນ ກຳມະສິດເອກະພາບຂອງທົ່ວປວງຊົນຕໍ່ພາຫະນະການ ຜະລິດມີຖານະຄອບຄອງ, ບັນດາຊົນຊັ້ນ ແລະ ຄວາມແຕກຕ່າງດ້ານຊົນຊັ້ນ ຈະສູນຫາຍໄປ. ການແຈກຢາຍຊັບສິນວັດຖຸຈະດຳເນີນໄປຕາມຫລັກການ:" ເຮັດຕາມຄວາມສາມາດ, ຊົມໃຊ້ຕາມຄວາມຕ້ອງການ ".

## ໔. ສັດຈະວິພາກຂອງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດ

ນັບເປັນຜູ້ທຳອິດທີ່ລັດທິມາກໄດ້ໄຈ້ແຍກລັກສະນະ ແບບມີກົດເກນ ຂອງສາຍພົວພັນເຊື່ອງກັນ ແລະ ກັນລະຫວ່າງກຳລັງການແຫ່ງຜະລິດ ແລະການພົວພັນແຫ່ງການຜະລິດ, ໄຈ້ແຍກລັກສະນະແບບມີກົດເກນແຫ່ງການຂະຫຍາຍຕົວຂອງວິທີການຜະລິດເວົ້າລວມ, ໄຈ້ແຍກສັດຈະວິພາກຂອງວິທີການຜະລິດ. ສາຍພົວພັນເຊື່ອງກັນ ແລະ ກັນແບບສັດຈະວິພາກລະຫວ່າງສອງດ້ານຂອງວິທີ ການຜະລິດນັ້ນ ສະແດງອອກໂດຍຜ່ານກົດເກນວ່າດ້ວຍການພົວພັນແຫ່ງການຜະລິດສອດຄ່ອງກັບລັກສະນະ ແລະ ລະດັບການຂະຫຍາຍຕົວຂອງກຳລັງແຫ່ງ ການຜະລິດ. ກົດເກນວ່າດ້ວຍການພົວພັນແຫ່ງການຜະລິດສອດຄ່ອງກັບລັກສະນະ- ແລະ ລະດັບການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດນີ້ ຊີ້ແຈງໃຫ້ເຫັນ- ການສ້າງຕັ້ງ ແລະ ການຂະຫຍາຍຕົວຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ແລະ ການຂ້າມຜ່ານໄປສູ່ຮູບຖານຈັດຕັ້ງທີ່ຂະຫຍາຍຕົວກວ່າ.

ເພື່ອເຂົ້າໃຈທາດແທ້ຂອງກົດເກນ ດັ່ງກ່າວ, ແລະ ຈາກນັ້ນ, ເຂົ້າ ໃຈ

ທັງສັດຈະວິພາກຂອງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການ ຜະລິດ, ຕ້ອງໄຈ້ແຍກຈຸດພິເສດແຫ່ງການຂະຫຍາຍຕົວຂອງມັນ.

ກຳລັງແຫ່ງການຜະລິດ ແມ່ນພື້ນຖານຂອງຂະບວນວິວັດແຫ່ງການຜະລິດ, ແມ່ນເນື້ອໃນຂອງມັນ, ແລະ ປ່ຽນແປງໄວກ່ວາການພົວພັນແຫ່ງການຜະລິດ. ກຳລັງແຫ່ງການຜະລິດ ມີລັກສະນະເຄື່ອນເຫນັງກ່ວາ. ການປ່ຽນແປງໃນ - ດ້ານວິທີການຜະລິດ ເວລາໃດກໍ່ເລີ່ມຕົ້ນຈາກການປ່ຽນແປງ ແລະ ການ ຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ ແລະ ພຽງແຕ່ຫລັງຈາກນັ້ນຈິ່ງເກີດ ມີການປ່ຽນແປງດ້ານການພົວພັນແຫ່ງການຜະລິດ. ເພື່ອຢາກໄດ້ຊັບສິນວັດຖຸ - ຫລາຍກ່ວາ, ເຮັດໃຫ້ແຮງງານຂອງຄົນມີຜົນສູງກ່ວາ, ມີສະມັດຖະພາບ ສູງກ່ວານັ້ນ, ຄົນປັບປຸງ ແລະ ປະດິດສ້າງເຄື່ອງມືອອກແຮງງານໃຫມ່ຂຶ້ນ ມາແຕ່ລະກ້າວ, ໂດຍນຳໃຊ້ຜົນສຳເລັດດ້ານວິທະຍາສາດ ແລະ ເຕັກນິກ. ໃນຂະນະດຽວກັນນັ້ນ ກະໂຕຄົນກໍມີການປ່ຽນແປງ ເຊັ່ນດຽວກັນ. ເພາະວ່າ - ເຄື່ອງຈັກເຄື່ອງລາງ ຍິ່ງສັບສົນຂຶ້ນເທົ່າໃດ, ຄົນທີ່ເຮັດວຽກກັບມັນຍິ່ງ ຕ້ອງຮັບຮູ້ຫລາຍເທົ່ານັ້ນ.

ການພົວພັນແຫ່ງການຜະລິດ ປ່ຽນແປງ ຊ້າກ່ວາກຳລັງແຫ່ງການຜະລິດ ແລະ ໄປຕາມຫລັງກຳລັງແຫ່ງການຜະລິດ ໃນການຂະຫຍາຍຕົວ ທັງມີລັກສະນະເຄື່ອນເຫນັງຫນ້ອຍກ່ວາ ເມື່ອທຽບໃສ່ກຳລັງແຫ່ງການຜະລິດ. ໃນເບື້ອງຕົ້ນ ກຳລັງແຫ່ງການຜະລິດປ່ຽນແປງກ່ອນ, ແລະ ຫລັງຈາກນັ້ນ ການພົວພັນແຫ່ງການຜະລິດ ກໍມີການປ່ຽນແປງຍ້ອນຜົນກະທົບຂອງກຳລັງແຫ່ງການຜະລິດ. ການປ່ຽນແປງນີ້ບໍ່ດຳເນີນໄປຢ່າງສະຫມ່ຳສະເຫມີ, ຫາກດຳເນີນໄປພຽງແຕ່ໃນເງື່ອນໄຂປະຫວັດສາດທີ່ແນ່ນອນເທົ່ານັ້ນ. ການພົວພັນແຫ່ງການຜະລິດຮັກສາຄວາມສາມາດກະທົບຄືນຕໍ່ກຳລັງແຫ່ງການຜະລິດ. ການພົວພັນແຫ່ງ ການຜະລິດ ພາໃຫ້ເກີດມີຄວາມອາດສາມາດອັນກ້ວາງຂວາງ, ພາໃຫ້ເກີດມີ ສະຫນາມເພື່ອໃຫ້ກຳລັງແຫ່ງການຜະລິດ ໄດ້ຮັບການຂະຫຍາຍຕົວ, ຫລືວ່າຖ່ວງດຶງການຂະຫຍາຍຕົວດັ່ງກ່າວ.

ດັ່ງນີ້, ກົດເກນວ່າດ້ວຍການພົວພັນແຫ່ງການຜະລິດ ສອດຄ່ອງກັບລັກສະນະ ແລະ ລະດັບຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ, ໃນຂໍ້ທີຫນຶ່ງ ໄດ້ຊີ້ແຈງໃຫ້ເຫັນເລື່ອງທີ່ການພົວພັນແຫ່ງການຜະລິດຂຶ້ນກັບການຂະຫຍາຍ ຕົວ

ຂອງກຳລັງແຫ່ງການຜະລິດ: ເພາະວ່າການປ່ຽນແປງດ້ານກຳລັງ ແຫ່ງການຜະລິດ ຈະນຳໄປເຖິງການຖ່າຍທອດການພົວພັນແຫ່ງການຜະລິດ ໃນໄລຍະທີ່ແນ່ນອນ. ຂໍ້ທີສອງ, ກົດເກນນີ້ ໄດ້ສະແດງໃຫ້ເຫັນຄວາມສາມາດຂອງການພົວພັນແຫ່ງການຜະລິດ ທີ່ສົ່ງຜົນກະທົບຄືນໃສ່ກຳລັງແຫ່ງການຜະລິດ, ໃຫ້ເຫັນລັກສະນະຕັ້ງໜ້າຂອງການພົວພັນແຫ່ງການຜະລິດ, ຄວາມເປັນ ເອກະລາດແບບທຽບຖານຂອງການພົວພັນແຫ່ງການຜະລິດ, ຂໍ້ທີສາມ, ກົດເກນດັ່ງກ່າວ ຍັງໄດ້ຊີ້ແຈງໃຫ້ເຫັນວ່າ ໃນການກະທົບເຊິ່ງກັນ ແລະ ກັນລະຫວ່າງ-ກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດນັ້ນ ກຳລັງ ແຫ່ງການຜະລິດ ແມ່ນອັນຕົ້ນຕໍ ແລະ ຕັດສິນ.

ກົດເກນວ່າດ້ວຍການພົວພັນແຫ່ງການຜະລິດ ສອດຄ່ອງກັບລັກສະນະແລະລະດັບການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດນັ້ນ ມີຜົນບັງຄັບໃຊ້ ໃນທຸກໆຮູບຖານຈັດຕັ້ງ. ຫາກແຕ່ກົດເກນດັ່ງກ່າວມີຈຸດພິເສດໃນການສະແດງຕົວອອກໃນຮູບຖານຈັດຕັ້ງ ທີ່ມີລັກສະນະປໍລະປັກກັນ ແລະ ບໍ່ປໍລະປັກກັນ. ເຊັ່ນ, ພາຍໃຕ້ລະບອບທຶນນິຍົມ ການສອດຄ່ອງກັນລະຫວ່າງກຳລັງແຫ່ງການຜະລິດ-ແລະ ການພົວພັນແຫ່ງການຜະລິດນັ້ນ ບໍ່ໝັ້ນຄົງ. ລັກສະນະສັງຄົມຂອງແຮງງານມີການຂັດແຍ່ງກັນກັບກຳມະສິດສ່ວນຕົວຕໍ່ ພາຫະນະການຜະລິດ, ອັນນີ້ມັນສະແດງອອກໃນວິກິດການດ້ານເສດຖະກິດ, ໃນການຜະລິດຕົກຕ່ຳແລະອື່ນໆ.

ຢູ່ໃນໄລຍະອັນແນ່ນອນ ການພົວພັນແຫ່ງການຜະລິດກາຍມາເປັນການ - ຖ່ວງດຶງສຳລັບການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ, ມັນບໍ່ອຳນວຍຄວາມສະດວກໃຫ້ນຳໃຊ້ຢ່າງເຕັມສ່ວນ ຜົນສຳເລັດຂອງຄວາມກ້າວໜ້າທາງດ້ານເຕັກນິກ ເພື່ອໃຫ້ເປັນຜົນປະ ໂຫຍດແກ່ທັງໝົດສັງຄົມນັ້ນ. ຄວາມ ຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດ ນັ້ນຮ້າຍແຮງທີ່ສຸດ ຈົນວ່າມີແຕ່ໂດຍຜ່ານການປະຕິວັດສັງຄົມ ໂດຍຜ່ານການ ລົບລ້າງການຍຶດຖືກຳມະສິດສ່ວນຕົວຕໍ່ພາຫະນະການຜະລິດເທົ່ານັ້ນ ຈຶ່ງສາມາດແກ້ໄຂໄດ້.

" ໃນໄລຍະທີ່ແນ່ນອນແຫ່ງການຂະຫຍາຍຕົວຂອງຕົນ ກຳລັງແຫ່ງ ການຜະລິດທີ່ເປັນວັດຖຸຂອງສັງຄົມ ມີຄວາມຂັດແຍ່ງກັບການພົວພັນແຫ່ງການຜະລິດທີ່ມີຢູ່ແລ້ວ, ຫລືວ່າອັນນີ້ແມ່ນ ພຽງແຕ່ການສະແດງຕົວອອກໃນດ້ານ ກົດ

ໝາຍຂອງການພົວພັນແຫ່ງການຜະລິດເທົ່ານັ້ນ ເຊິ່ງຂັດແຍ່ງກັບການພົວພັນ-ດ້ານກຳມະສິດ, ເຊິ່ງຈົນເຖິງປັດຈຸບັນນີ້ ກຳລັງແຫ່ງການຜະລິດ ຍັງຄົງ ຂະໜຍາຍຕົວໃນການພົວພັນດັ່ງກ່າວນີ້ຢູ່. ຈາກຮູບແບບແຫ່ງການຂະໜຍາຍ ຕົວຂອງກຳລັງແຫ່ງການຜະລິດ, ການພົວພັນດັ່ງກ່າວໄດ້ກາຍເປັນສາຍໂສ້ ຖ່ວງດຶງກຳລັງແຫ່ງການຜະລິດ. ເມື່ອນັ້ນ ຍຸກສະໄໝແຫ່ງການປະຕິວັດທາງ ສັງຄົມ ກໍຈະມາເຖິງ "[໑].

ການລົບລ້າງການພົວພັນແຫ່ງການຜະລິດແບບເກົ່າ ທີ່ຫລ້າຫລັງແລ້ວແລະ ການກຳເນີດຂຶ້ນຂອງການພົວພັນແຫ່ງການຜະລິດ ແບບໃໝ່ນັ້ນ ເປັນສິ່ງ ກຳນົດການຂ້າມຜ່ານຈາກຮູບຖານຈັດຕັ້ງສັງຄົມ-ເສດຖະກິດໜຶ່ງ ໄປສູ່ຮູບຖານ-ຈັດຕັ້ງອັນໃໝ່.

ໃນເງື່ອນໄຂສັງຄົມ ສັງຄົມນິຍົມ ຄວາມສອດຄ່ອງກັນລະຫວ່າງການ ພົວພັນແຫ່ງການຜະລິດ ແລະ ກຳລັງແຫ່ງການຜະລິດນັ້ນ ໝັ້ນຄົງຖາວອນເພາະ ກຳມະສິດສັງຄົມຕໍ່ພາຫະນະການຜະລິດ ສອດຄ່ອງກັບລັກສະນະສັງຄົມ ຂອງແຮງງານ. ອັນນີ້ມັນຫລີກເວັ້ນວິກິດການ ແລະ ໄຂຊ່ອງທາງອັນກວ້າງ ໃຫຍ່ສຳລັບການຂະຫຍາຍຕົວຂອງກຳລັງແຫ່ງການຜະລິດ. ແຕ່ຄວາມສອດຄ່ອງ -ຢ່າງສົມບູນ ແລະ ເດັດຖານລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດນັ້ນ ກໍບໍ່ທັນມີໃນລະບອບສັງຄົມນິຍົມເທື່ອ. ອັນນີ້ກໍ ເນື່ອງຈາກວ່າ ຢູ່ນີ້ການພົວພັນແຫ່ງການຜະລິດກໍປ່ຽນແປງຊ້າກວ່າກຳລັງແຫ່ງການ-ຜະລິດ, ຢູ່ຕາມຫລັງກຳລັງແຫ່ງການຜະລິດໜ້ອຍໜຶ່ງ. ໃນໄລຍະທີ່ແນ່ນອນ ເກີດມີຄວາມຂັດແຍ່ງກັນ ລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດ. ແຕ່ຄວາມຂັດແຍ່ງເຫລົ່ານີ້ ບໍ່ມີລັກສະນະປໍລະປັກກັນເພາະວ່າພາຍໃຕ້ສັງຄົມນິຍົມ ກຳມະສິດສັງຄົມຕໍ່ພາຫະນະການຜະລິດ ມີຖານະຄອບຄອງ. ອັນນີ້ມັນຫລີກເວັ້ນບັນຫາຄົນຂູດຮີດຄົນ. ຈຸດໝາຍພື້ນຖານຂອງ ການຜະລິດພາຍໃຕ້ສັງຄົມນິຍົມນັ້ນ ແມ່ນການຕອບສະໜອງຄວາມຮຽກຮ້ອງ ຕ້ອງການຂອງຊາວຜູ້ອອກແຮງງານທຸກຄົນ. ດ້ວຍເຫດນັ້ນ ຜົນປະໂຫຍດພື້ນຖານຂອງທຸກໆຊົນຊັ້ນ ແລະ ຊັ້ນຄົນໃນສັງຄົມ ຈຶ່ງແມ່ນອັນດຽວກັນ. ຢູ່ນີ້ສະມາຊິກ

໑) ກ.ມາກແລະຟ.ອັງແກນ.ປະມວນບົດນິພົນຄົບຊຸດ, ເຫລັ້ມທີ ໑໓, ໜ້າ ໗.

ສັງຄົມທຸກຄົນ ລ້ວນແຕ່ມີຄວາມສົນໃຈໃນການປັບປຸງວິທີການຜະລິດໃຫ້ດີຂຶ້ນກວ່າເກົ່າ.

ໃນເງື່ອນໄຂສັງຄົມນິຍົມ ຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດ ໄດ້ຮັບການແກ້ໄຂໃນຂອບເຂດແຫ່ງຄວາມສອດຄ່ອງລວມລະຫວ່າງມັນເອງ. ອັນນີ້ໝາຍຄວາມວ່າ ການພົວພັນ ແຫ່ງການຜະລິດບໍ່ແມ່ນໄປນຳຫລັງຢ່າງຕົ້ນສ່ວນ, ຢ່າງລວມ, ຫາກພຽງແຕ່ ໃນບາງດ້ານເທົ່ານັ້ນ. ດ້ານດັ່ງກ່າວນີ້ມີຄວາມຂັດແຍ່ງກັນກັບກຳລັງແຫ່ງການຜະລິດທີ່ກ້າວໜ້າໄວກວ່າ. ອັນນີ້ແມ່ນການຂັດແຍ່ງຂອງການເຕີບໃຫຍ່ ແລະຂະຫຍາຍຕົວ. ການແກ້ໄຂຄວາມຂັດແຍ່ງດັ່ງກ່າວ ບໍ່ຮຽກຮ້ອງໃຫ້ທັບມ້າງ, ດັບສູນການພົວພັນແຫ່ງການຜະລິດທີ່ມີຢູ່ແລ້ວ. ມັນແກ້ໄຂດ້ວຍເສັ້ນທາງແຫ່ງການປັບປຸງການພົວພັນແຫ່ງການຜະລິດ ໃຫ້ດີຂຶ້ນໃນອັນຕໍ່ໄປ, ເຊິ່ງດຳເນີນໄປຢ່າງມີແຜນການ, ມີສະຕິ ແລະ ທັນການ ດ້ວຍວິທີການປັບປຸງການ ພົວພັນແຫ່ງການຜະລິດໃຫ້ສອດຄ່ອງກັບກຳລັງແຫ່ງການຜະລິດ ທີ່ພວມເຕີບໃຫຍ່ ຂະຫຍາຍຕົວນັ້ນໄປແຕ່ລະກ້າວ.

ການແກ້ໄຂຄວາມຂັດແຍ່ງທີ່ເກີດຂຶ້ນນັ້ນ ດຳເນີນໄປໂດຍສອດຄ່ອງກັບຜົນປະໂຫຍດອັນຕົ້ນຕໍຂອງຊາວຜູ້ອອກແຮງງານ. ບົດບາດທີ່ໃຫຍ່ຫລວງໃນນັ້ນໄດ້ແກ່ນະໂຍບາຍການເມືອງຂອງພັກ, ການເຄື່ອນໄຫວຂອງລັດ ແລະ ລັກສະນະຕັ້ງໜ້າແບບມີຫົວຄິດປະດິດສ້າງຂອງມະຫາຊົນ. ຄວາມຂັດແຍ່ງຖືກຄົ້ນພົບຢ່າງທັນການ, ມີການວາງແຜນການ ແລະ ປະຕິບັດໃນຕົວຈິງບັນດາມາດຕາການລະອຽດ ເພື່ອແກ້ໄຂຄວາມຂັດແຍ່ງດັ່ງກ່າວ. ທຸກສິ່ງເຫລົ່ານີ້ໄດ້ນຳ ໄປເຖິງເລື່ອງທີ່ວ່າ ການແກ້ໄຂຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ- ແລະ ການພົວພັນແຫ່ງການຜະລິດນັ້ນ ນຳໄປເຖິງການຮັດແໜ້ນ ແລະ ເສີມຂະຫຍາຍວິທີການຜະລິດໃນອັນຕໍ່ໄປ.

## ນ. ໂຄງລ່າງ ແລະ ໂຄງບົນ

ສ່ວນປະກອບທີ່ສຳຄັນຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດນັ້ນແມ່ນໂຄງ

ລ່າງ ແລະ ໂຄງບົນ.

ໃນຂະບວນວິວັດແຫ່ງຊີວິດຂອງສັງຄົມ ລະຫວ່າງຄົນໄດ້ເກີດມີການພົວພັນທາງດ້ານເສດຖະກິດ, ການເມືອງ, ກົດໝາຍ, ຊຸນລະທຳ ແລະ ອື່ນໆ, ແຕ່ການພົວພັນພື້ນຖານ ແລະ ມີລັກສະນະຕັດສິນນັ້ນ ແມ່ນການພົວພັນ ແຫ່ງການຜະລິດ. ແມ່ນການພົວພັນນີ້ເອງ ທີ່ປະກອບເປັນໂຄງລ່າງເສດຖະກິດ.

ກ.ມາກ ໄດ້ກຳນົດໂຄງລ່າງ ເປັນຄືການສັງລວມການພົວພັນແຫ່ງ ການຜະລິດ, ຄືໂຄງຮ່າງເສດຖະກິດຂອງສັງຄົມ ທີ່ໄດ້ປະກົດຕົວຂຶ້ນມາ ບົນ ພື້ນຖານຮູບແບບຂອງກຳມະສິດຕໍ່ພາຫະນະການຜະລິດທີ່ຄອບຄອງໃນສັງຄົມ ດັ່ງກ່າວ.[1]

ຄວາມເວົ້າ "ໂຄງລ່າງ" ໃຊ້ເພື່ອຊີ້ແຈງໃຫ້ເຫັນວ່າ ການພົວພັນດ້ານວັດຖຸ ແລະ ການຜະລິດນັ້ນ ແມ່ນພື້ນຖານຂອງທຸກດ້ານໃນຊີວິດຂອງສັງຄົມ. ໂຄງລ່າງ ກຳນົດທຸກໆການພົວພັນດ້ານສັງຄົມອື່ນໆ, ກຳນົດລັກສະນະຂອງລະບອບສັງຄົມ, ຂົງເຂດດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ຈິດໃຈຂອງຊີວິດ. ພົນກະທົບທີ່ກຳລັງແຫ່ງການຜະລິດມີຕໍ່ຂົງເຂດດັ່ງກ່າວນີ້ໄດ້ ສະແດງອອກໂດຍຜ່ານລະບົບການພົວພັນແຫ່ງການຜະລິດ, ໂດຍຜ່ານໂຄງລ່າງ. ໃນຖານະເປັນການສັງລວມຂອງການພົວພັນແຫ່ງການຜະລິດແລ້ວ ໂຄງ ລ່າງປະກອບເປັນຮາກເຫງົ້າຮູບຖານຈັດຕັ້ງສັງຄົມ-ເສດຖະກິດ.

ລະຫວ່າງໂຄງລ່າງ ແລະ ການພົວພັນແຫ່ງການຜະລິດມີຄວາມແຕກຕ່າງໃນຈຸດໃດ ? ເພາະວ່າສ່ວນປະກອບຂອງທັງສອງນີ້ຄືກັນໝົດ. ໃນຄວາມຈິງແລ້ວ, ໃນດ້ານເນື້ອໃນຂອງມັນ, ຄວາມເຂົ້າໃຈກ່ຽວກັບ "ໂຄງລ່າງ" ບໍ່ແຕກຕ່າງກັບຄວາມເຂົ້າໃຈກ່ຽວກັບ "ການພົວພັນແຫ່ງການຜະລິດ". ແຕ່ລະຫວ່າງພວກມັນມີຄວາມແຕກຕ່າງກັນ. ເພາະວ່າ ໃນເມື່ອໄຈ້ແຍກສາຍພົວພັນຂອງການພົວພັນແຫ່ງການຜະລິດ ແລະ ກຳລັງແຫ່ງການຜະລິດ ມັນເປັນ ດ້ານໜຶ່ງໃນຈຳນວນດ້ານຂອງວິທີການຜະລິດ. ໃນເມື່ອໄຈ້ແຍກສາຍພົວພັນ ຂອງການພົວພັນແຫ່ງການຜະລິດ ແລະ ໂຄງບົນແລ້ວ ມັນເປັນຄືໂຄງລ່າງ.

ໂຄງລ່າງມີບົດບາດໃຫຍ່ຫລວງ ໃນຊີວິດຂອງສັງຄົມ ເພາະຖ້າຫາກຄົນບໍ່

---

໑) ກ.ມາກ ແລະ ຟ.ອັງແກນ.ບົດນິພົນ.ເຫລັ້ມທີ ໑໓, ໜ້າ ໖-໗.

ມີການພົວພັນດ້ານເສດຖະກິດ ຊຶ່ງກັນ ແລະ ກັນແລ້ວ ແມ່ນວ່າຄົນກໍ່ບໍ່ສາມາດຈະຜະລິດ ແລະ ແຈກຢາຍພາຫະນະດຳລົງຊີວິດ. ໃນສຸດທ້າຍໂຄງລ່າງເປັນສິ່ງກຳນົດລັກສະນະ, ໂສມໜ້າຂອງສັງຄົມ, ກຳນົດແນວຄິດ ແລະ ສະຖາບັນຂອງສັງຄົມ. ໂຄງລ່າງແມ່ນພື້ນຖານຕົ້ນຕໍແຫ່ງການຂະຫຍາຍຕົວຂອງສ່ວນປະກອບຂອງໂຄງບົນ ແລະ ການຂະຫຍາຍຕົວຂອງທົ່ວທັງໂຄງບົນເວົ້າລວມ.

ລັດທິມາກ-ເລນິນ ຖືວ່າ "ໂຄງບົນ" ແມ່ນການສັງລວມການພົວພັນດ້ານແນວຄິດ, ອົງການຈັດຕັ້ງ ແລະ ສະຖາບັນ, ແນວຄິດ ແລະ ທັດສະນະຂອງຄົນ, ທີ່ກຳນົດດ້ວຍພື້ນຖານເສດຖະກິດຂອງສັງຄົມ.

ດັ່ງນີ້ ໂຄງບົນ ປະກອບດ້ວຍ: ການພົວພັນດ້ານແນວຄິດ ທີ່ສອດຄ່ອງກັບໄລຍະທີ່ກ່ຽວຂ້ອງແຫ່ງການຂະຫຍາຍຕົວຂອງສັງຄົມ ເຊັ່ນການພົວພັນ ທາງດ້ານການເມືອງ, ກົດໝາຍ, ຄຸນສົມບັດ,ສິລະປະທັດ ສາສະໜາ ແລະອື່ນອື່ນ; ບັນດາສະຖາບັນ ແລະ ອົງການຈັດຕັ້ງທີ່ສ້າງຕັ້ງຂຶ້ນມາ ໂດຍສອດຄ່ອງກັບການພົວພັນດັ່ງກ່າວ ເຊັ່ນລັດ, ພັກການເມືອງ, ກຳມະບານ, ອົງການ-ຈັດຕັ້ງທາງສາສະໜາ ແລະ ອື່ນໆ; ນັບທັງບັນດາແນວຄິດ, ທັດສະນະ ທີ່ສ່ອງແສງເຖິງການພົວພັນດ້ານສັງຄົມ,ກ່ອນອື່ນໝົດ, ດ້ານເສດຖະກິດ ລະຫວ່າງຄົນກັບຄົນ.

ໃນສັງຄົມທີ່ແບ່ງອອກເປັນຊົນຊັ້ນ ທີ່ເປັນປໍລະປັກກັນນັ້ນ, ໂຄງລ່າງແລະໂຄງບົນ ແມ່ນສິ່ງທີ່ຂັດແຍ່ງ ກັນພາຍໃນ. ໂຄງລ່າງຂອງສັງຄົມທຶນນິຍົມສ່ອງແສງເຖິງການພົວພັນທີ່ແຕກຕ່າງກັນຂອງນາຍທຶນ ແລະ ຊົນຊັ້ນກຳມາຊີບຕໍ່ພາຫະນະການຜະລິດ. ໂຄງລ່າງຊີ້ແຈງເຖິງລັກສະນະກົງກັນຂ້າມກັນ ລະຫວ່າງຜົນປະໂຫຍດຂອງບັນດາຊົນຊັ້ນ, ແລະ ຈາກນັ້ນ, ສະແດງເຖິງລັກສະນະ ປໍລະປັກກັນລະຫວ່າງຜູ້ກົດຂີ່ຂູດຮີດ ແລະ ຜູ້ຖືກກົດຂີ່ຂູດຮີດ. ໂຄງບົນສ່ອງແສງເຖິງຄວາມຂັດແຍ່ງກັນໃນໂຄງລ່າງ. ດ້ວຍເຫດນັ້ນໃນສັງຄົມທີ່ມີລັກສະນະ ປໍລະປັກກັນ ລະຫວ່າງຊົນຊັ້ນນັ້ນ ໂຄງບົນກໍ່ມີລັກສະນະປໍລະປັກເຊັ່ນດຽວກັນ.

ໂຄງບົນກວມລວມເອົາແນວຄິດແລະສະຖາບັນຂອງຊົນຊັ້ນແລະກຸ່ມຄົນໃນສັງຄົມທີ່ແຕກຕ່າງກັນ. ແນວຄິດ ແລະ ສະຖາບັນຂອງຊົນຊັ້ນທີ່ເປັນເຈົ້າຂອງພາຫະນະການຜະລິດ ແລະ ກຳອຳນາດທາງດ້ານເສດຖະກິດນັ້ນ ມີຖານະເປັນ-ໃຈກາງ ແລະ ຄອບຄອງຢູ່ໂຄງບົນ ເຊັ່ນຕົວຢ່າງ ພາຍໃຕ້ລະບອບທຶນນິຍົມ-

ແນວຄິດນາຍທຶນ, ພັກ ແລະ ລັດຂອງນາຍທຶນມີຖານະເປັນໃຈກາງແລະຄອບຄອງຢູ່ໂຄງປົນ ໂດຍອາໄສສິ່ງເຫລົ່ານີ້ ນາຍທຶນພະຍາຍາມເຮັດໃຫ້ການ ປົກຄອງຂອງຕົນດຳເນີນໄປຢ່າງໝັ້ນຄົງຖາວອນ ແລະ ນຳໃຊ້ສິ່ງເຫລົ່ານີ້ ເພື່ອດຳເນີນການຕໍ່ສູ້ຕ້ານຊົນຊັ້ນກຳມະກອນ ແລະ ຊົນຊັ້ນທີ່ບໍ່ແມ່ນກຳມາຊີບອື່ນ ໆ ໃນພົນລະເມືອງ.

ຫາກແຕ່ໃນການຕໍ່ສູ້ຕ້ານກັບນາຍທຶນ ຊົນຊັ້ນກຳມະກອນໄດ້ກໍ່ສ້າງແນວຄິດ ແລະ ອຸດົມຄະຕິຂອງຕົນ, ຈັດຕັ້ງອົງການຈັດຕັ້ງຂອງຕົນ ເຊັ່ນພັກການ - ເມືອງ, ກຳມະບານ ແລະ ອື່ນໆ. ທຸກສິ່ງເຫລົ່ານີ້ ປະກອບເປັນສ່ວນ ໜຶ່ງຂອງໂຄງປົນໃນສັງຄົມນາຍທຶນ. ມັນບໍ່ມີຖານະຄອບຄອງໃນລະບອບທຶນນິຍົມ, ແຕ່ຊົນຊັ້ນກຳມະກອນ ອີງໃສ່ມັນໃນການຕໍ່ສູ້ຢ່າງຕັ້ງໜ້າເພື່ອປົດປ່ອຍຕົນເອງ.

ໂຄງລ່າງ ແລະ ໂຄງປົນມີການພົວພັນເຊິ່ງກັນ ແລະ ກັນຢ່າງແໜ້ນ ແຟ້ນ ແລະ ຢູ່ໃນການກະທົບເຊິ່ງກັນ ແລະ ກັນແບບສັດຈະວິພາກຢ່າງສັບສົນ. ທາດແທ້ຂອງການກະທົບເຊິ່ງກັນ ແລະ ກັນດັ່ງນີ້ຢູ່ບ່ອນວ່າ ຖ້າທຽບໃສ່ໂຄງປົນແລ້ວ ໂຄງລ່າງມີລັກສະນະນຳໜ້າ, ມັນໃຫ້ກຳເນີດແກ່ໂຄງປົນ ກຳນົດເນື້ອໃນ - ຂອງມັນ. ທຳມະຊາດຂອງໂຄງລ່າງ ເປັນແນວໃດ, ລັກສະນະພິເສດ ຂອງໂຄງປົນ ກໍ່ເປັນເຊັ່ນນັ້ນ. ເຊັ່ນຕົວຢ່າງໃນໂຄງລ່າງຂອງລະບອບປະຖົມ ບູຮານ ບໍ່ມີກຳມະສິດເອກະເທດຕໍ່ພາຫະນະການຜະລິດ. ດ້ວຍເຫດນັ້ນໃນໂຄງປົນກໍ່ບໍ່ມີແນວຄິດການເມືອງ ແລະ ກົດໝາຍ, ບໍ່ມີສະຖາບັນລັດ. ການທີ່ກຳມະສິດເອກະເທດຕໍ່ພາຫະນະການຜະລິດໄດ້ປະກົດຕົວຂຶ້ນ ມາແລະສັງຄົມ ໄດ້ແຍກອອກເປັນຊົນຊັ້ນທີ່ປໍລະປັກກັນນັ້ນແມ່ນລັກສະນະພິເສດ ຂອງໂຄງລ່າງໃນສັງຄົມຂ້າທາດ. ອັນນີ້ພາໃຫ້ເກີດມີໂຄງປົນໃໝ່. ໄດ້ເກີດມີແນວຄິດທີ່ ພິສູດຄວາມຖືກຕ້ອງຂອງການເປັນຂ້າທາດ. ໄດ້ເກີດມີລັດ ແລະ ບັນດາອົງ ການຈັດຕັ້ງອື່ນໆທີ່ປົກປ້ອງການປົກຄອງຂອງພວກເຈົ້າທາດ.

ການປ່ຽນແປງທີ່ເປັນທາດແທ້ຂອງໂຄງລ່າງ ພາໃຫ້ເກີດມີການປ່ຽນແປງໃນໂຄງປົນ ທີ່ແທດເໝາະກັນ. ໃນນັ້ນໂຄງປົນ ບໍ່ປ່ຽນແປງໃນທັນໃດໂລດ, ແຕ່ຫາກປ່ຽນແປງໄປເທື່ອລະກ້າວ. ໃນເບື້ອງຕົ້ນໂຄງລ່າງປ່ຽນແປງກ່ອນ , ແລະ ຫລັງຈາກນັ້ນ ການປ່ຽນແປງໃນໂຄງປົນ ໄດ້ດຳເນີນໄປຢ່າງໄວຫລາຍຫລືໜ້ອຍກວ່າ. ຕົວຢ່າງການຂ້າມຜ່ານໄປເຖິງການປົກຄອງຂອງນາຍທຶນຜູກ

ຂາດໃນສັງຄົມທຶນນິຍົມ ສະໄໝໃໝ່ນັ້ນ ໄດ້ພາໃຫ້ເກີດມີການປ່ຽນແປງດ້ານທາດແທ້ໃນໂຄງບົນ. ລັດໄດ້ຜັນປ່ຽນເປັນອົງການທີ່ປົກປ້ອງຜົນປະໂຫຍດຂອງນາຍທຶນຜູກຂາດກ່ອນອື່ນໝົດ.

ໂຄງບົນມີຄວາມເປັນເອກະລາດແບບທຽບຖານ ແລະ ສົ່ງຜົນກະທົບ ຄືນໃສ່ໂຄງລ່າງ. ມັນໄດ້ສະແດງອອກໃນການທີ່ໂຄງບົນສາມາດໄປກ່ອນ ໂຄງລ່າງ, ຫລືກົງກັນຂ້າມ, ໄປຕາມຫລັງມັນ. ເຊັ່ນຕົວຢ່າງ, ໃນໄລຍະກ່ອນ ທີ່ການປະຕິວັດເດືອນຕຸລາຈະໄດ້ຮັບໄຊຊະນະໃນປີ ໑໙໑໗ ຢູ່ລັດເຊຍ ໄດ້ມີ - ແນວຄິດລັດທິມາກ ແລະ ພັກການເມືອງຂອງຊົນຊັ້ນກຳມະກອນ, ໝາຍຄວາມວ່າ ບາງສ່ວນປະກອບຂອງໂຄງບົນ ຂອງສັງຄົມໃໝ່ນັ້ນ ໄດ້ກຳເນີດ ກ່ອນໂຄງລ່າງຂອງມັນ. ອີກດ້ານໜຶ່ງ, ຢູ່ລັດເຊຍສະໄໝທ້າຍສະຕະວັດທີ ໑໙ ໂຄງລ່າງເປັນແບບນາຍທຶນ, ແລະ ໂຄງບົນຍັງເປັນແບບ ເຄິ່ງສັກດີນາຢູ່ , ເພາະວ່າລະບອບລາຊາທິປະໄຕ ແລະ ລະບອບປົກຄອງແບບເຄິ່ງສັກດີນາຍັງຮັກສາໄວ້ຢູ່. ນອກຈາກນັ້ນ ໂຄງບົນມີລັກສະນະສືບທອດທີ່ແນ່ນອນ ໃນການ-ຂະຫຍາຍຕົວ. ໂຄງບົນໃໝ່ບໍ່ດັບສູນອັນເກົ່າຢ່າງສິ້ນເຊີງ. ຍ້ອນມີລັກສະນະ-ສືບທອດນັ້ນເອງ ໃນໂຄງບົນຂອງແຕ່ລະລະບອບສັງຄົມໃໝ່ຈິ່ງມີບາງແນວ ຄິດແລະ ສະຖາບັນທີ່ສືບຕໍ່ມາຈາກສັງຄົມເກົ່າ, ແລະ ຍັງມີແນວຄິດແລະ ສະຖາບັນທີ່ໄດ້ເກີດຂຶ້ນມາ ບົນພື້ນຖານການພົວພັນດ້ານເສດຖະກິດແບບໃໝ່ ແລະບົນພື້ນຖານເສດຖະກິດໃໝ່. ໂຄງບົນມີບົດບາດອັນຕັ້ງໜ້າໃນການຂະຫຍາຍຕົວຂອງໂຄງລ່າງ. ມັນສາມາດອຳນວຍຄວາມສະດວກໃຫ້ແກ່ການເສີມ ຂະຫຍາຍແລະປັບປຸງໂຄງລ່າງ ແລະ ຍັງສາມາດຖ່ວງດຶງການຂະຫຍາຍຕົວຂອງມັນອີກພ້ອມ.

ພາຍໃຕ້ສັງຄົມນິຍົມ ການກະທົບຊຶ່ງກັນ ແລະ ກັນລະຫວ່າງໂຄງ ລ່າງແລະ ໂຄງບົນ ກໍ່ມີຈຸດພິເສດເຊັ່ນກັນ. ໃນໂຄງລ່າງຂອງສັງຄົມ ສັງຄົມນິຍົມບໍ່ມີການປໍລະປັກກັນ. ເວລາໃດໂຄງລ່າງນັ້ນກໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ, ກຳມະສິດສັງຄົມຕໍ່ພາຫະນະການຜະລິດໄດ້ຮັບການຂະຫຍາຍຕົວ, ຄວາມໂຕນກັນລະຫວ່າງຊົນຊັ້ນຖືກລຶບລ້າງໄປ ແລະ ບັນດາຊົນຊັ້ນກໍ່ໃກ້ຊິດເຂົ້າກັນເທື່ອ ລະກ້າວ, ບັນດາຮູບແບບຂອງການແຈກຢາຍຊັບສິນວັດຖຸ ກໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ພາຍໃຕ້ຜົນສະທ້ອນຂອງໂຄງລ່າງໄດ້ມີການຂະຫຍາຍຕົວຂອງ ໂຄງ

ບົນສັງຄົມນິຍົມ. ລັກສະນະຕັ້ງໜ້າຂອງໂຄງບົນ ເພີ່ມທະວີຂຶ້ນຫລວງຫລາຍ, ອັນນີ້ສະແດງອອກໃນການເພີ່ມທະວີບົດບາດຂອງພັກ, ຂອງລັດສັງຄົມນິຍົມ , ແລະ ຂອງບັນດາອົງການຈັດຕັ້ງມະຫາຊົນ. ມັນໄດ້ຮັບການຢືນຢັນຢ່າງ ໜັກແໜ້ນໂດຍຜ່ານຕົວຢ່າງຂອງພັກປະຊາຊົນປະຕິວັດລາວ. ທ່ານໄກສອນ ພົມວິຫານ ໄດ້ຂຽນວ່າ: ນັບຕັ້ງແຕ່ໄດ້ກຳເນີດເປັນຕົ້ນມາ, ພັກເຮົາ ( ໃນເມື່ອກ່ອນແມ່ນພັກກອມມູນິດອິນດູຈີນ ແລະ ໃນປັດຈຸບັນແມ່ນພັກປະຊາຊົນປະຕິວັດລາວ )- ຕົວແທນທີ່ແທ້ຈິງໃຫ້ແກ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນ , ຂອງປະຊາຊົນຜູ້ອອກແຮງງານ ແລະ ຂອງຊາດເຮົາທັງໝົດ-ສາມາດ ກຳແໜ້ນກົດເກນຂະຫຍາຍຕົວພາວະວິໄສຂອງສັງຄົມ ເພື່ອແກ້ໄຂບັນດາບັນຫາ-ຍຸດທະສາດ ແລະ ຍຸດໂທບາຍຂອງການປະຕິວັດປະເທດເຮົາຢ່າງຖືກຕ້ອງ , ເຮັດໃຫ້ການຕໍ່ສູ້ອັນກ້າແກ່ນອົງອາດຂອງປະຊາຊົນເຮົາ ຫັນໄປສູ່ບາດລ້ຽວ - ໃໝ່ ດ້ວຍໄຊຊະນະປະຫວັດສາດຕິດຕໍ່ເນື່ອງກັນຕະຫລອດມາ ແລະ ໃນທີ່ສຸດໄດ້ປົດປ່ອຍປະເທດຊາດທັງໝົດ, ສ້າງຕັ້ງສາທາລະນະລັດ ປະຊາທິປະ-ໄຕປະຊາຊົນລາວ, ນຳເອົາປະເທດຊາດກ້າວຂຶ້ນສັງຄົມນິຍົມ.[໑]

"ພັກເຮົາເປັນປັດໄຈພື້ນຖານ ທີ່ຕັດ ສິນກ່ອນໝູ່ຕໍ່ການສຳເລັດຜົນ ຂອງການປະຕິວັດປະເທດເຮົາ; ຄັນບໍ່ມີພັກ ແລະ ການນຳພາຂອງພັກແລ້ວ, ການປະຕິວັດກໍບໍ່ອາດມີໄຊຊະນະອັນບໍລິບູນ ແລະ ເຖິງຖອງຄືໃນຊຸມນີ້ໄດ້ ".[໒]

"ໂດຍຈົງຮັກພັກດີຕໍ່ບັນດາຫລັກມູນຂອງລັດທິມາກ-ເລນິນ ແລະ ໂດຍເລີ່ມຈາກຈຸດພິເສດຂອງປະເທດຊາດ, ຈາກສະພາບແວດລ້ອມແຫ່ງການຕໍ່ສູ້ ຂອງການປະຕິວັດປະເທດເຮົາ, ໃນສິ່ງແວດລ້ອມຂອງການປະຕິວັດຂອງບັນດາປະເທດໃນອິນດູຈີນ ແລະ ການປະຕິວັດໂລກ, ພັກເຮົາໄດ້ສົມທົບການຄົ້ນຄວ້າ, ຊອກເຫັນດ້ວຍຕົນເອງ ກັບການຮໍ່າຮຽນບົດຮຽນແຫ່ງການຂົນຂວາຍແລະ ຕໍ່ສູ້ປະຕິວັດຂອງບັນດາພັກອ້າຍນ້ອງຢ່າງມີການເລືອກເຟັ້ນ ເພື່ອແກ້ໄຂບັນຫາ - ຕ່າງໆກ່ຽວກັບຍຸດທະສາດ, ຍຸດໂທບາຍ, ວິທີປະຕິວັດຂອງປະເທດເຮົາແລະ

---

໑) ໄກສອນພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ. ສຳນັກພິມ ສ.ປ.ປ.ລ. ໑໙໘໙. ໜ້າ ໒໔໒-໒໔໓.

໒) ປຶ້ມເຫລັ້ມດຽວກັນ. ໜ້າ ໒໔໔.

ກໍໄດ້ຮັບຜົນສຳເລັດອັນຈົບງາມ. ໂດຍຍົກສູງ ຄັນທາຍຸດທະສາດຂອງການປະຕິວັດຊາດ-ປະຊາທິປະໄຕ ດ້ວຍບັນດາເນື້ອໃນອັນຖືກຕ້ອງ ແທດເໝາະ ກັບສະພາບການສັງຄົມຂອງປະເທດເຮົາ, ພັກເຮົາໄດ້ສ້າງ ກອງກຳລັງ ພົນທະພາບກຳມະກອນ-ຊາວນາ ອັນແໜ້ນແກ່ນເປັນກອງກຳລັງຫຼວງອັນໃຫຍ່ ໂຕຂອງການປະຕິວັດ, ແລະ ບົນພື້ນຖານດັ່ງກ່າວນັ້ນ ໄດ້ເຮັດໃຫ້ທຸກໆຊົນຊາດ, ຊົນເຜົ່າ, ປະຊາຊົນທຸກຊັ້ນຄົນໃນທົ່ວປະເທດສາມັກຄີກັນໃນແນວໂຮມ ເອກະພາບແຫ່ງຊາດອັນກວ້າງຂວາງ ພາຍໃຕ້ການນຳພາຂອງພັກ. ໂດຍກຳແໜ້ນທັດສະນະກຳລັງຮຸນແຮງປະຕິວັດ ແລະ ແນວຄິດຍຸດທະສາດບຸກ, ພັກເຮົາໄດ້ອອກແຮງສ້າງກຳລັງປະກອບອາວຸດປະຊາຊົນ ແລະ ກຳລັງການເມືອງ ຂອງມະຫາຊົນ ໄດ້ຢ່າງເຂັ້ມແຂງ, ໝູນໃຊ້ວິທີປະຕິວັດຢ່າງຖືກຕ້ອງ ໂດຍສົມທົບການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງ, ສົມທົບສົງຄາມປະຊາຊົນກັບການລຸກຮື້ຂຶ້ນຂອງມະຫາຊົນ, ສົມທົບການຕໍ່ສູ້ດ້ວຍກຳລັງຮຸນແຮງກັບການຕໍ່ສູ້ເຂົ້າຮ່ວມປະສົມກັບຝ່າຍກົງກັນຂ້າມ ເພື່ອຍາດເອົາໄຊຊະນະເທື່ອລະກ້າວ, ໂຄ່ນລົ້ມສັດຕູເປັນເທື່ອລະພາກສ່ວນ ກ້າວຂຶ້ນໂຄ່ນລົ້ມສັດຕູທັງໝົດ, ຍາດເອົາໄຊຊະນະອັນສົມບູນ. ໂດຍເຊື່ອມຊຶມຈິດໃຈສາກົນກຳມາຊີບອັນແທ້ຈິງ, ບົນພື້ນຖານແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບກັບການປະຕິວັດຂອງປະຊາຊົນ - ສອງປະເທດຫວຽດນາມ ແລະ ກຳປູເຈຍອ້າຍນ້ອງ ແລະ ຍາດແຍ່ງທຸກການຊ່ວຍເຫຼືອຂອງສາກົນ, ພັກເຮົາໄດ້ ສົມທົບຜົນປະໂຫຍດຂອງຊາດກັບຜົນປະໂຫຍດຂອງການປະຕິວັດໂລກ, ສົມທົບກຳລັງແຮງຂອງຊາດກັບກຳລັງ ແຮງ-ຂອງຍຸກສະໄໝຢ່າງຖືກຕ້ອງ ເພື່ອສ້າງເປັນກຳລັງແຮງສັງລວມອັນໃຫຍ່ຫຼວງ, ຕີເອົາຊະນະສັດຕູຜູ້ມາຮຸກຮານທຸກໂຕ.

ດ້ວຍແນວທາງຍຸດທະສາດ, ຍຸດໂທບາຍ, ແລະ ວິທີປະຕິວັດດັ່ງກ່າວມາເທິງນັ້ນ ພັກເຮົາໄດ້ເຮັດໃຫ້ການປະຕິວັດຊາດ-ປະຊາທິປະໄຕປະຊາຊົນຢູ່ໃນປະເທດເຮົາສຳເລັດຜົນຢ່າງສົມບູນ, ໄຂສັງກາດໃໝ່ໃຫ້ແກ່ຊາດເຮົາ, ສັງກາດແຫ່ງສັນຕິພາບ, ເອກະລາດ, ປະຊາທິປະໄຕ, ກ້າວຂຶ້ນສັງຄົມນິຍົມ . ຈາກພຶດຕິກຳແຫ່ງໄຊຊະນະອັນຍິ່ງໃຫຍ່ນັ້ນ ແລະ ຜ່ານບົດຮຽນແຫ່ງການ ຕໍ່ສູ້ອັນຍືດເຍື້ອຍາວນານຂອງຕົນ, ປະຊາຊົນບັນດາຊົນຊາດ ໃນທົ່ວປະເທດເຮົາໄດ້ຮັບຮູ້ຢ່າງຈະແຈ້ງວ່າ ຜູ້ນຳທີ່ແທ້ຈິງຂອງຊາດເຮົາ ແລະ ຜູ້ຈັດຕັ້ງ ທຸກໄຊ

ຊະນະຂອງການປະຕິວັດ ປະເທດເຮົາ ແມ່ນພັກປະຊາຊົນປະຕິວັດລາວ"[໑)].

## ໔. ການຂະຫຍາຍຕົວຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ແລະຄວາມກ້າວໜ້າທາງສັງຄົມ

ການປະກົດຕົວ, ການສ້າງຕັ້ງ ແລະ ການຂະຫຍາຍຕົວຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ມີລັກສະນະຖືກ ຕ້ອງຕາມກົດເກນ ແລະ ດຳເນີນໄປໃນຖານະເປັນຂະບວນວິວັດແຫ່ງທຳມະຊາດ ແລະ ປະຫວັດສາດ. ອັນນີ້ໝາຍຄວາມວ່າ ການຂະຫຍາຍຕົວຂອງສັງຄົມ ດຳເນີນໄປຕາມບັນດາ ກົດເກນພາວະວິໄສ ທີ່ບໍ່ຂຶ້ນກັບມານະຈິດ ແລະ ຈິດສຳນຶກຂອງຄົນ, ແລະ ການຂະຫຍາຍຕົວຂອງສັງຄົມ ແມ່ນຂະບວນວິວັດແຫ່ງການເຄື່ອນເໜັງຂອງມວນມະນຸດຈາກຮູບຖານຈັດຕັ້ງໜຶ່ງ ກ້າວຂຶ້ນໄປສູ່ຮູບຖານຈັດຕັ້ງອີກອັນໜຶ່ງ ທີ່ກ້າວໜ້າກວ່າ.

ໃນຈຳນວນກົດເກນພາວະວິໄສ ທີ່ຄອບຄອງການຂະຫຍາຍຕົວຂອງ ຮູບຖານຈັດຕັ້ງນັ້ນ ມີກົດເກນລວມ ແລະ ກົດເກນສະເພາະ. ກົດເກນທັງສອງ-ປະເພດນີ້ ມີການພົວພັນເຊິ່ງກັນ ແລະ ກັນ ແລະ ປະກອບເປັນຄວາມ ເປັນເອກະພາບແບບພາວະວິໄສ.

ກົດເກນລວມ ທີ່ຊີ້ໃຫ້ເຫັນເຖິງການຂະຫຍາຍຕົວດ້ານສັງຄົມນັ້ນ ແມ່ນກົດເກນທີ່ກຳນົດ ການຂະຫຍາຍຕົວຂອງຮູບຖານຈັດຕັ້ງຕ່າງໆ ແລະ ກຳນົດການຂ້າມຜ່ານຈາກຮູບຖານຈັດຕັ້ງສັງຄົມ-ເສດຖະກິດໜຶ່ງໄປສູ່ຮູບຖານຈັດຕັ້ງໃໝ່. ເຊັ່ນ ຕົວຢ່າງ ໃນຈຳນວນກົດເກນດັ່ງກ່າວນີ້ ມີກົດເກນວ່າດ້ວຍບົດບາດ ຕັດສິນຊີ້ຂາດຂອງວິທີການຜະລິດ ໃນການຂະຫຍາຍຕົວທາງດ້ານສັງຄົມ, ມີ ກົດເກນທີ່ກຳນົດທິດທາງຂອງການຂະຫຍາຍຕົວທາງສັງຄົມ, ກຳນົດລຳດັບອັນແນ່ນອນແຫ່ງການຜັນປ່ຽນຮູບຖານຈັດຕັ້ງ ( ຕົວຢ່າງກໍຄືກົດເກນວ່າດ້ວຍການພົວ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ.ສຳນັກພິມຈຳໜ່າຍ ສ.ປ.ປ.ລ. ໑໙໗໙. ໜ້າ ໒໗໔-໒໗໕-໒໗໖.

ພັນແຫ່ງການຜະລິດສອດຄ່ອງກັບລັກສະນະ ແລະ ລະດັບຂະຫຍາຍຕົວ ຂອງກຳລັງແຫ່ງການຜະລິດ), ມີກົດເກນທີ່ສະແດງເຖິງກົນຈັກການຂ້າມຜ່ານ ຈາກຮູບຖານຈັດຕັ້ງສັງຄົມ-ເສດຖະກິດໜຶ່ງໄປສູ່ຮູບຖານຈັດຕັ້ງອີກອັນໜຶ່ງ. ສ່ວນກົດເກນສະເພາະມີຜົນບັງຄັບໃຊ້ພຽງແຕ່ໃນຮູບຖານຈັດຕັ້ງຈຳນວນໜຶ່ງ ຫລືພຽງແຕ່ໃນຮູບຖານຈັດຕັ້ງດຽວເທົ່ານັ້ນ. ຕົວຢ່າງກໍຄືກົດເກນພື້ນຖານຂອງທຶນນິຍົມ, ກົດເກນຂອງການຕໍ່ສູ້ຊົນຊັ້ນ, ການປະຕິບັດຜະເດັດການຊົນຊັ້ນກຳມາຊີບ ໃນຮູບແບບນີ້ຫລືຮູບແບບນັ້ນ ໃນໄລຍະຂ້າມຜ່ານຈາກທຶນນິຍົມໄປສູ່ສັງຄົມນິຍົມ.

ຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ແມ່ນໄລຍະທີ່ແນ່ນອນໃນການ ຂະຫຍາຍຕົວຂອງສັງຄົມ ເວົ້າລວມໃນການເຄື່ອນເໜັງທີ່ມີລັກສະນະກ້າວ ໜ້າຂອງມວນມະນຸດແຕ່ຕ່ຳໄປເຖິງສູງ. ດ້ວຍເຫດນັ້ນ ທິດສະດີວ່າດ້ວຍຮູບຖານ-ຈັດຕັ້ງສັງຄົມເສດຖະກິດ ຈຶ່ງຕິດພັນກັນກັບທິດສະດີວ່າດ້ວຍຄວາມກ້າວໜ້າ - ທາງສັງຄົມ. ຄວາມກ້າວໜ້າທາງສັງຄົມກວມລວມເອົາດ້ານຕ່າງໆຂອງຊີວິດໃນສັງຄົມ. ດ້ວຍເຫດນັ້ນ ຈຶ່ງສາມາດຕີລາຄາລັກສະນະຄວາມກ້າວໜ້າທາງສັງຄົມ ໂດຍຜ່ານຈຸດພິເສດຕ່າງໆ. ນັ້ນຄືລະດັບການຂະຫຍາຍຕົວຂອງ ການຜະລິດວັດຖຸ, ລະດັບທີ່ສັງຄົມບັງຄັບທຳມະຊາດ, ການຂະຫຍາຍຕົວຂອງການພົວພັນ ທາງດ້ານສັງຄົມ-ການເມືອງ, ລະດັບການປົດປ່ອຍຄົນອອກຈາກການກົດຂີ່ຂູດຮີດ ແລະ ຈາກຮູບການກົດຂີ່ອື່ນທາງດ້ານສັງຄົມອື່ນໆ, ລະດັບ ການຂະຫຍາຍຕົວຂອງວິທະຍາສາດ, ວັດທະນະທຳ, ສິລະປະ, ການບຳລຸງ ຄົນໃຫ້ດີຂຶ້ນກວ່າເກົ່າ ແລະ ອື່ນໆ. ມາດຕະຖານຕົ້ນຕໍແຫ່ງການຂະຫຍາຍ ຕົວທາງດ້ານສັງຄົມນັ້ນ ແມ່ນສະພາບການ ແລະ ການຂະຫຍາຍຕົວຂອງ ກຳລັງແຫ່ງການຜະລິດ ຕະຫລອດທັງການພົວພັນແຫ່ງການຜະລິດອີກດ້ວຍ.

ສັງຄົມນີ້ ຫລືສັງຄົມນັ້ນ ອາດຈະຖືວ່າເປັນສັງຄົມທີ່ກ້າວໜ້າ ກວ່າໝູ່ຖ້າຫາກມັນອຳນວຍຄວາມສະດວກຫລາຍກວ່າໝູ່ ສຳລັບການເພີ່ມທະວີສະມັດຖະພາບຂອງແຮງງານ ແລະ ສຳລັບອິດສະຫລະພາບໃນການເສີມຂະ ຫຍາຍຕົວຄິດປະດິດສ້າງທີ່ມີລັກສະນະປະຫວັດສາດຂອງມະຫາຊົນ ຊາວຜູ້ອອກແຮງງານ ສັງຄົມຈະມີລັກສະນະກ້າວໜ້າກວ່າໝູ່ ຖ້າຫາກໃນສັງຄົມໄດ້ກໍ່ໃຫ້ເກີດຄວາມອາດສາມາດຢ່າງຫລວງຫລາຍ ເພື່ອການເພີ່ມທະວີ ແລະ ຕອບສະໜອງ -

ຄວາມຮຽກຮ້ອງຕ້ອງການດ້ານວັດຖຸ ແລະຈິດໃຈໃຫ້ແກ່ຊາວຜູ້ອອກແຮງງານ, ເພື່ອເສີມຂະຫຍາຍ ແລະ ນຳໃຊ້ຄວາມສາມາດ ແບບມີຫົວຄິດປະດິດ ສ້າງຂອງພວກເຂົາເຈົ້າ, ເພື່ອເຮັດໃຫ້ບຸກຄົນປ່ຽນລົ້ນໄປດ້ວຍຄູນສົມບັດອັນ ສູງສົ່ງ.

ການຂະຫຍາຍຕົວຂອງສັງຄົມແບບກ້າວໄປໜ້າ ດຳເນີນໄປໃນ ຖານະເປັນຂະບວນວິວັດທີ່ສັບສົນ ຊຶ່ງພ້ອມກັນກັບການເຄື່ອນເໜັງໄປທາງໜ້າຢ່າງບໍ່ຢຸດຢັ້ງແລ້ວ ຍັງກວມລວມເອົາປະກົດການຢຸດຊະງັກ, ການຖອຍຫລັງ ຊົ່ວຄາວ, ການຍ່ຳເທົ້າຢູ່ບ່ອນເກົ່າ ແລະ ອື່ນໆ. ວ.ອີ.ເລນິນ ໄດ້ຂຽນວ່າ : "... ການສຳນຶກວ່າ ປະຫວັດສາດຂອງທົ່ວໂລກ ດຳເນີນໄປຢ່າງລ່ຽນໄຫລ ແລະ ເດີນໄປທາງໜ້າຢ່າງເປັນລະບຽບຮຽບຮ້ອຍ ໂດຍປາສະຈາກ ການຖອຍຫລັງຂະໜາດໃຫຍ່ໃນບາງຄັ້ງບາງຄາວນັ້ນ ບໍ່ແມ່ນສັດຈະວິພາກ, ຝືນວິທະຍາສາດ, ບໍ່ຖືກຕ້ອງໃນແງ່ທິດສະດີ" ໑). ໃນນັ້ນ ການພົນປ່ຽນບັນດາຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ກໍບໍ່ດຳເນີນໄປຕາມແບບແຜນທີ່ແນ່ນອນ . ເຊັ່ນຕົວຢ່າງ, ມີຫລາຍປະເທດ ຍ້ອນສາຍເຫດພາວະວິໄສ ໄດ້ກ້າວ ຂ້າມສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ.

ທ່າມກາງການກ້າວໜ້າທາງສັງຄົມ ການຂະຫຍາຍຕົວ ຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດໃໝ່ ດຳເນີນໄປຢ່າງໄວກວ່າຮູບຖານຈັດຕັ້ງເກົ່າເຊັ່ນລະບອບປະຖົມບູຮານ ໄດ້ຄົງຢູ່ໃນໄລຍະຫລາຍຮ້ອຍພັນປີ ລະບອບຂ້າທາດ - ຫລາຍກວ່າ ໔ ພັນປີ, ລະບອບສັກດີນາ ລະຫວ່າງ ໑,໕ ພັນປີ, ລະບອບທຶນນິຍົມ ບໍ່ເທົ່າໃດຮ້ອຍປີ, ສັງຄົມນິຍົມໃນຖານະເປັນ ໄລຍະທີໜຶ່ງ ຂອງກອມມູນິດນິຍົມນັ້ນ ຄົງຢູ່ໜ້ອຍກວ່າຮ້ອຍປີ. ໃນການຂ້າມຜ່ານຈາກ ຮູບຖານຈັດຕັ້ງໜຶ່ງໄປສູ່ຮູບຖານຈັດຕັ້ງອີກອັນໜຶ່ງທີ່ກ້າວໜ້າກວ່ານັ້ນ ຮູບ ຖານຈັດຕັ້ງແບບເກົ່າບໍ່ສູນຫາຍໄປຢ່າງເຕັມສ່ວນ. ເຊັ່ນພາຍຫລັງການສ້າງຕັ້ງ - ແລ້ວ ທຶນນິຍົມໄດ້ຄົງຢູ່ຮ່ວມກັນກັບເສດເຫລືອຂອງສັກດີນາໃນໄລຍະຍາວນານ, ແມ່ນແຕ່ປະເທດໃນທະວີບເອີລົບຕາເວັນຕົກ. ປະຈຸບັນນີ້ສັງຄົມນິຍົມຄົງຢູ່ຮ່ວມກັນບໍ່ພຽງແຕ່ກັບລະບອບທຶນນິຍົມເທົ່ານັ້ນ, ແຕ່ຍັງຄົງຢູ່ຮ່ວມກັນກັບບັນດາ ປະ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໐, ໜ້າ ໖.

ເທດ ທີ່ສືບຕໍ່ຢູ່ໃນໄລຍະຂະຫຍາຍຕົວ ດ້ານສັງຄົມ ແບບສັກດີນາ. ອັນນີ້ເວົ້າເຖິງລັກສະນະ ບໍ່ສະຫມໍ່າສະເຫມີ ຂອງຄວາມກ້າວຫນ້າ ທາງປະຫວັດສາດ. ການຄົງຢູ່ຮ່ວມກັນ ລະຫວ່າງຮູບຖານຈັດຕັ້ງ ທີ່ແຕກຕ່າງກັນນັ້ນ ແມ່ນຖືກຕ້ອງຕາມກົດເກນປະຫວັດສາດ, ແຕ່ ໄວຫລືຊ້າ ໂຄງຮ່າງສັງຄົມທີ່ຫລ້າຫລັງ - ແລ້ວນັ້ນ ຕ້ອງຖອຍອອກຈາກເວທີປະຫວັດສາດຢ່າງຫລີກເວັ້ນບໍ່ໄດ້.

ໃນບັນດາຮູບຖານຈັດຕັ້ງສັງຄົມເສດຖະກິດ ທີ່ແຕກຕ່າງກັນນັ້ນ ກົດເກນລວມແຫ່ງຄວາມກ້າວຫນ້າທາງສັງຄົມ ປະກົດຕົວອອກຢ່າງແຕກຕ່າງກັນ. ຈຸດພິເສດດັ່ງກ່າວກໍານົດຕົວດ້ວຍທາດແທ້ຂອງຮູບຖານຈັດຕັ້ງ ທີ່ກ່ຽວຂ້ອງ,ລັກສະນະຂອງຄວາມຂັດແຍ່ງພື້ນຖານ ແລະ ກໍາລັງຂຸກດັນໃນຮູບຖານຈັດຕັ້ງ ດັ່ງກ່າວ ແລະ ອື່ນໆ. ເຊັ່ນ ໃນຮູບຖານຈັດຕັ້ງທີ່ມີການປົ້ນລະປັກກັນດ້ານ ຊົນຊັ້ນ ( ລະບອບຂ້າທາດ, ສັກດີນາ, ທຶນນິຍົມ ), ຄວາມກ້າວຫນ້າໃນຂົງເຂດເສດຖະກິດ, ການພົວພັນດ້ານການເມືອງ-ສັງຄົມ, ວິທະຍາສາດ ແລະ ວັດທະນະທໍານັ້ນ ດໍາເນີນໄປໂດຍມີການຂູດຮີດຄົນຈໍານວນຫລວງຫລາຍ, ມີຄວາມບໍ່ສະເຫມີພາບທາງຊົນຊັ້ນ ແລະ ການປົ້ນລະປັກກັນ. ທຸກໆຜົນ ສໍາເລັດຕົ້ນຕໍຂອງຄວາມກ້າວຫນ້າໄດ້ຕົກຢູ່ໃນກໍາມືຂອງຊົນຊັ້ນທີ່ປົກຄອງໃນດ້ານເສດ-ຖະກິດ. ລັກສະນະພິເສດຂອງຄວາມກ້າວຫນ້າປະເພດນີ້ ແມ່ນລັກສະນະບໍ່ສົມສ່ວນ, ບໍ່ສະຫມໍ່າສະເຫມີໃນການຂະຫຍາຍຕົວຂອງສັງຄົມ, ແມ່ນການ ປົວແປງຊີວິດສັງຄົມດ້ານຫນຶ່ງ ໂດຍສ້າງຄວາມເສຍຫາຍແກ່ອີກດ້ານຫນຶ່ງ ແລະມີວິກິດການທີ່ເລິກເຊິ່ງ.

ຮູບຖານຈັດຕັ້ງແບບກອມມູນິດນິຍົມ ໄດ້ເລີ່ມຕົ້ນສັງກາດໃຫມ່ ດ້ານຄຸນນະພາບ ໃນປະຫວັດສາດຂອງທົ່ວໂລກ. ຂະບວນວິວັດແຫ່ງການສ້າງຕັ້ງ ແລະ ຂະຫຍາຍຕົວຂອງຮູບຖານຈັດຕັ້ງດັ່ງກ່າວ ໄດ້ກວມລວມເອົາສາມໄລຍະທີ່ປ່ຽນແທນກັນຢ່າງມີກົດເກນ, ເຊັ່ນ: ໄລຍະຂ້າມຜ່ານຈາກທຶນນິຍົມ ກ້າວຂຶ້ນສູ່ສັງຄົມນິຍົມ, ສັງຄົມນິຍົມ ແລະ ກອມມູນິດນິຍົມ ທີ່ສົມບູນ. ຍ້ອນການປະຕິວັດສັງຄົມນິຍົມ ຊົນຊັ້ນກໍາມະກອນທີ່ມີພັນທະພາບກັບຊາວນາ ໄດ້ສ້າງຕັ້ງອໍານາດການປົກຄອງຂອງຕົນ ແລະ ເລີ່ມຕົ້ນກໍ່ສ້າງສັງຄົມໃຫມ່. ພວກນາຍທຶນ ບໍ່ປະລະຊັບສົມບັດ ແລະ ອໍານາດການປົກຄອງຂອງຕົນຢ່າງເຕັມໃຈ, ແລະ ຈົນກະທັ້ງພາຍຫລັງທີ່ການປະຕິວັດສັງຄົມນິຍົມ ໄດ້ສໍາເລັດແລ້ວ ພວກເຂົາຍັງພະ

ຍາຍາມຢາກຕ້ານຄືນຢູ່. ມັນຈຳເປັນຕ້ອງມີໄລຍະທີ່ແນ່ນອນເພື່ອລຶບລ້າງ ບັນດາຊົນຊັ້ນກົດຂີ່ຂູດຮີດ ເຖິງຂັ້ນສຸດທ້າຍ. ນອກຈາກນັ້ນຊົນຊັ້ນກຳມະກອນແລະພັນທະມິດຈຳຕ້ອງກໍ່ສ້າງພື້ນຖານວັດຖຸ-ເຕັກນິກອັນໝັ້ນຄົງຂອງສັງຄົມໃໝ່ , ຕ້ອງດັດສ້າງການຜະລິດກະສິກຳນັບພື້ນຖານສັງຄົມນິຍົມ ແລະ ແບບລວມໝູ່, ລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບວັດທະນະທຳຂອງປະຊາຊົນໃຫ້ສູງ-ຂຶ້ນ, ສ້າງຕັ້ງການພົວພັນແບບສັງຄົມນິຍົມ ໃນທຸກຂົງເຂດຂອງຊີວິດສັງຄົມ. ທຸກງານໜ້າທີ່ເຫລົ່ານີ້ໄດ້ຮັບການແກ້ໄຂໃນໄລຍະຂ້າມຜ່ານ.

ປະເທດລາວ ກໍ່ພວມດຳເນີນໄລຍະຂ້າມຜ່ານຈາກທຶນນິຍົມ ກ້າວຂຶ້ນ ສັງຄົມນິຍົມດັ່ງນີ້. ໂດຍອີງໃສ່ຂະບວນວິວັດແຫ່ງການຂະຫຍາຍຕົວຂອງ ປະເທດລາວ ພາຍຫລັງທີ່ການປະຕິວັດຊາດ-ປະຊາທິປະໄຕ ຂອງປະຊາຊົນໄດ້ຮັບໄຊຊະນະແລ້ວນັ້ນ ທ່ານໄກສອນ ພົມວິຫານ ໄດ້ເນັ້ນໜັກວ່າ: ລັດທິລ່າເມືອງ-ຂຶ້ນ ແລະ ສັກດີນາຍັງປະຜົນຮ້າຍໄວ້ຢ່າງຄະນານັບບໍ່ໄດ້; ກຳລັງແຫ່ງ ການຜະລິດ ແລະ ການພົວພັນ ແຫ່ງການຜະລິດຂອງປະເທດເຮົາ ໃນດ້ານ ພື້ນຖານຍັງບໍ່ທັນມີການປ່ຽນແປງພໍປານໃດເທື່ອ, ແບບວິທີການຜະລິດທຶນນິຍົມໃນເຂດທົ່ງພຽງ, ຕົວເມືອງທີ່ໄດ້ຮັບການປົດປ່ອຍຕາມຫລັງກໍ່ດີແບບວິທີການ ຜະລິດຂອງສັກດີນາ ແລະ ກ່ອນສັກດີນາໃນເຂດຊົນນະບົດອັນກວ້າງໃຫຍ່ໄພສານນັ້ນ ໃນດ້ານພື້ນຖານແລ້ວກໍ່ຍັງຄົງຕົວຢູ່ຄືເກົ່າ; ແບບວິທີການຜະລິດສັງຄົມ ນິຍົມໄດ້ປະກົດຕົວຂຶ້ນແລ້ວ ແຕ່ຫາກຍັງອ່ອນນ້ອຍທີ່ສຸດ, ບໍ່ທັນມີຄວາມ ສາມາດພຽງພໍໃນການຄວບຄຸມຊີ້ນຳເສດຖະກິດແຫ່ງຊາດ; ແນວຄິດນິໄສເດີມ ຂອງການຜະລິດນ້ອຍ ກໍ່ຍັງເປັນອັນທົ່ວໄປຢູ່, ຮ່ອງຮອຍເສດເຫລືອແລະຜົນສະ - ທ້ອນຫລາຍສິ່ງຫລາຍແນວຂອງລະບອບສັກດີນາ, ລ່າເມືອງຂຶ້ນກໍ່ຍັງບໍ່ທັນ ລຶບລ້າງຢ່າງສິ້ນເຊີງໄດ້ເທື່ອ; ຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດຍັງພົບຄວາມຫຍຸ້ງຍາກຫລາຍ ປະການ, ແລະ ອັນທີ່ຕ້ອງເອົາໃຈໃສ່ແມ່ນບັນດາປັດໃຈທຶນນິຍົມຍັງເກີດຂຶ້ນ ແລະ ຂະຫຍາຍຕົວຕາມມັນເອງ ເປັນປະຈຳ ແຕ່ລະມື້ແຕ່ລະຍາມ. ສະພາບການນັ້ນ ພວມວາງລະດັບຄາດໝາຍໃໝ່ ແລະ ໜ້າທີ່ໃໝ່ອັນໜັກໜ່ວງ ແລະ ຮີບດ່ວນທີ່ສຸດໃຫ້ພັກ ແລະ ປະຊາຊົນ ເຮົາຄື:

໑. ດັດສ້າງການພົວພັນແຫ່ງການຜະລິດແບບເກົ່າ ແລະ ກໍ່ສ້າງ ການ

ພົວພັນແຫ່ງການຜະລິດແບບໃຫມ່. ອັນນີ້ມັນຮຽກຮ້ອງໃຫ້ປ່ຽນແປງລະບົບ ກຳມະສິດຢ່າງເຕັມສ່ວນ, ຫມາຍຄວາມວ່າ ຕ້ອງລົບລ້າງເສດຖະກິດນາຍທຶນ ທີ່ສ້າງຂຶ້ນບົນພື້ນຖານຫຼູລະກິດເອກະຊົນ ແລະ ກໍ່ສ້າງກຳມະສິດແບບສັງຄົມນິຍົມໃນສອງຮູບການຄື ຂອງສັງຄົມ ແລະ ຂອງລວມຫມູ່. ດັ່ງນັ້ນເອງ ຈຶ່ງຈະ ຮັບປະກັນໃຫ້ການພົວພັນແຫ່ງການຜະລິດແບບສັງຄົມນິຍົມມີບົດບາດເປັນເຈົ້າ ພາທາງໃນເສດຖະກິດແຫ່ງຊາດ; ການດັດສ້າງການພົວພັນແຫ່ງການຜະລິດ ຍັງຮຽກຮ້ອງໃຫ້ຮັບປະກັນການເສີມຂະຫຍາຍການຜະລິດ, ໃຫ້ຊາວຜູ້ອອກ ແຮງງານມີສິດເປັນເຈົ້າລວມຫມູ່; ດັດສ້າງການຜະລິດນ້ອຍກະແຈກກະຈາຍ, ເອກະເທດໃຫ້ເປັນການຜະລິດ ໃຫຍ່ສັງຄົມນິຍົມ ແລະ ຕັດຮາກຕົ້ນກຳເນີດ - ແຫ່ງການຂະຫຍາຍຕົວຂອງທຶນນິຍົມ.

໔. ດັດສ້າງການຜະລິດ, ດຳເນີນການແບ່ງງານຄືນໃຫມ່ ແລະກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ທີ່ຈຳເປັນ, ເສີມຂະຫຍາຍກຳລັງແຫ່ງການຜະລິດ - ແລະ ເພີ່ມທະວີສະມັດຖະພາບຂອງງານ. ອັນນີ້ມັນຮຽກຮ້ອງໃຫ້ນຳໃຊ້ຫມາກຜົນຂອງການປະຕິວັດວິທະຍາສາດ-ເຕັກນິກຢ່າງຫລາຍທີ່ສຸດ, ໂດຍສະເພາະໃນຂົງເຂດກະສິກຳ ແລະ ປ່າໄມ້ ຫນ້າທີ່ຕົ້ນຕໍແມ່ນຕ້ອງຫັນການຜະລິດ ນ້ອຍກະແຈກກະຈາຍແບບເອກະເທດໃຫ້ເປັນການຜະລິດ ລວມຫມູ່ແບບສັງຄົມນິຍົມ.

໕. ຍົກສູງລະດັບວັດທະນະທຳຂອງປະຊາຊົນຢ່າງເນື່ອງນິດ. ຈຳເປັນຕ້ອງດັດສ້າງຊີວິດຂອງມະຫາຊົນ ໃນດ້ານຈິດໃຈ, ວັດທະນະທຳ ແລະ ສັງຄົມ, ກໍ່ສ້າງຄົນໃຫມ່ ທີ່ມີຄຸນສົມບັດປະຕິວັດສູງ, ວັດທະນະທຳສູງ, ມີຄວາມຮູ້ວິທະຍາສາດ-ເຕັກນິກ ທີ່ກ້າວຫນ້າ, ມີຄວາມສາມາດຈັດຕັ້ງ ແລະຄຸ້ມຄອງສັງຄົມ. ນີ້ຄືວຽກງານທີ່ຕ້ອງປະຕິບັດເພື່ອເສີມຂະຫຍາຍການຜະລິດ, ຍົກສູງ-ສະມັດຖະພາບຂອງງານສັງຄົມຢ່າງໄວ, ກໍ່ສ້າງພື້ນຖານວັດຖຸ-ເຕັກນິກ ຂອງສັງຄົມນິຍົມ [໑].

ພາຍຫລັງທີ່ໄດ້ແກ້ໄຂບັນດາຫນ້າທີ່ຂອງໄລຍະຂ້າມຜ່ານແລ້ວ ສັງຄົມນິຍົມໄດ້ຮັບໄຊຊະນະໃນດ້ານພື້ນຖານ. ສັງຄົມສັງຄົມນິຍົມ ເດີນຜ່ານໄລຍະຕ່າງໆຂອງການຂະຫຍາຍຕົວ. ໃນປະຈຸບັນມີຫລາຍປະເທດທີ່ແຕກຕ່າງກັນ ໃນລະ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ.ສຳນັກພິມຈຳຫນ່າຍ ສ.ປ.ປ.ລ. ໑໙໗໗.

ສັງຄົມ ໃນລະບອບກອມມູນິດນິຍົມ ຍັງຢູ່ບ່ອນວ່າ ມັນຍັງແມ່ນຜົນງານ ຂອງ
ການເຄື່ອນໄຫວແບບມີສະຕິຂອງຄົນ, ເພາະວ່າມະຫາຊົນປະກອບສ່ວນ ຢ່າງ
ຕັ້ງໜ້າເຂົ້າໃນການກໍ່ສ້າງສັງຄົມໃໝ່.

ກອມມູນິດນິຍົມ ແມ່ນອະນາຄົດອັນເຫລື້ອມໃສຂອງມວນມະນຸດທັງໝົດ .
ທິດສະດີມາກ-ເລນິນ ວ່າດ້ວຍຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ຊ່ວຍໃຫ້ສຶກ
ສາ ຄົ້ນຄວ້າປະຫວັດສາດຂອງມວນມະນຸດໃນຖາ ນະເປັນຂະບວນວິວັດ ທີ່ຖືກ
ຕ້ອງຕາມກົດເກນແຫ່ງການພັນ ປ່ຽນໄລຍະທີ່ລະອຽດໃນການຂະຫຍາຍຕົວ -
ຂອງສັງຄົມ ແຕ່ໄລຍະຕ່ຳໄປເຖິງໄລຍະສູງ ທີ່ກ້າວໜ້າກວ່າ. ທິດສະດີ ນີ້
ຊ່ວຍໃຫ້ໄຈ້ແຍກສາຍພົວພັນດ້ານເຫດຜົນໃນສັງຄົມ ແລະ ອະທິບາຍຢ່າງມີ ວິ
ທະຍາສາດບັນດາເຫດການປະຫວັດສາດ, ຊ່ວຍໃຫ້ກຳນົດມາດຕະຖານພາວະ
ວິໄສ ເພື່ອສົມທຽບລະບອບການປົກຄອງທາງສັງຄົມ ໃນປະເທດຕ່າງໆ,ຊ່ວຍ
ໃຫ້ກຳນົດຢ່າງຖືກຕ້ອງລະດັບຂະຫຍາຍຕົວດ້ານປະຫວັດສາດຂອງສັງຄົມ ໃດ
ໜຶ່ງທີ່ກ່ຽວຂ້ອງ. ທິດສະດີວ່າດ້ວຍຮູບຖານຈັດຕັ້ງສັງຄົມ-ເສດຖະກິດໄດ້ສ້າງ
ພື້ນຖານໃຫ້ແກ່ຄວາມຈຳເປັນຕ້ອງມີການຫັນປ່ຽນປະຕິວັດຈາກສັງຄົມທີ່ຫລ້າຫລັງ
ແລ້ວຂຶ້ນສູ່ສັງຄົມໃໝ່ ທີ່ກ້າວໜ້າກວ່າ, ໄຈ້ແຍກໄລຍະຕ່າງໆຂອງພື້ນ ຖານ
ແຫ່ງຄວາມກ້າວໜ້າທາງສັງຄົມ. ໂດຍໄຈ້ແຍກສາຍພົວພັນພາວະວິໄສ ລະ
ຫວ່າງດ້ານທີ່ເປັນທາດແທ້ຂອງຊີວິດສັງຄົມ ( ເຊັ່ນເສດຖະກິດ, ການເມືອງ,
ແນວຄິດ ), ທິດສະດີວ່າດ້ວຍຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ຊ່ວຍ ໃຫ້
ເຂົ້າໃຈສັດຈະວິພາກຂອງຂະບວນວິວັດແຫ່ງປະຫວັດສາດ, ທິດທາງກ້າວ ໄປ
ທາງໜ້າແຫ່ງການຂະຫຍາຍຕົວຂອງປະ ຫວັດສາດ, ຄວາມເປັນເອກະພາບ
ລະຫວ່າງທຸກໆດ້ານຂອງຊີວິດສັງຄົມໃນແຕ່ລະຂັ້ນ ແຫ່ງການຂະຫຍາຍຕົວຂອງ
ສັງຄົມ. ທິດສະດີນີ້ ບໍ່ພຽງແຕ່ມີຄວາມໝາຍສຳລັບ ການຮັບຮູ້ອະດີດ ເທົ່າ
ນັ້ນ, ແຕ່ຍັງມີຄວາມໝາຍສຳລັບການຄົ້ນຄວ້າປະຈຸບັນ, ແລະ ຄາດຄະ ເນ
ອະນາຄົດອີກດ້ວຍ.

ດັບຂະຫຍາຍຕົວທາງສັງຄົມ ແຕ່ເດີນຕາມທິດທາງອັນດຽວກັນ ແລະ ຄົງ ຢູ່ຮ່ວມກັນ. ເຊັ່ນໄປຄຽງຄູ່ກັບບັນດາປະເທດທີ່ຫາກໍ່ເລີ່ມຕົ້ນກໍ່ສ້າງສັງຄົມ ນິຍົມ ( ຕົວຢ່າງຄືລາວ ) ນັ້ນມີບັນດາປະເທດທີ່ສັງຄົມນິຍົມໄດ້ຮັບໄຊຊະນະ ແລ້ວ ( ສ່ວນຫລາຍໃນຈຳນວນປະເທດເອີລົບຕາເວັນອອກ ). ສະຫະພາບ ໂຊວຽດ ໄດ້ກ້າວຂຶ້ນສູ່ໄລຍະສັງຄົມນິຍົມທີ່ຂະຫຍາຍຕົວ ອັນເປັນຜົນສຳເລັດ ໃນລະດັບສູງສຸດຂອງຄວາມກ້າວໜ້າທາງປະຫວັດສາດໃນປະຈຸບັນນີ້.

ໃນຂົງເຂດເສດຖະກິດສັງຄົມນິຍົມຂະຫຍາຍຕົວ ມີພື້ນຖານວັດຖຸ-ເຕັກນິກທີ່ເຂັ້ມແຂງແຮງກ້າ, ມີເສດຖະກິດແຫ່ງຊາດທີ່ຂະຫຍາຍຕົວຮອບດ້ານ, ທີ່ຄຸ້ມຄອງດ້ວຍແຜນການເອກະພາບ. ເສດຖະກິດຂອງສັງຄົມນິຍົມຂະຫຍາຍຕົວ ມີຈັງຫວະຄວາມໄວສູງ ໃນການຂະຫຍາຍຕົວຂອງການຜະລິດ ແລະ ສະມັດຖະພາບຂອງງານບົນພື້ນຖານການ ຫມູນໃຊ້ຜົນສຳເລັດຂອງການປະຕິວັດວິທະຍາສາດ-ເຕັກນິກ. ໃນຂົງເຂດດ້ານການເມືອງ, ສັງຄົມນິຍົມຂະຫຍາຍຕົວເປັນຕົວແທນໃຫ້ແກ່ລັດທິປະຊາທິປະໄຕ, ໃຫ້ແກ່ອຳນາດການປົກຄອງຂອງປະຊາຊົນ, ລັດຂອງທົ່ວປວງຊົນ. ໃນຂົງເຂດດ້ານສັງຄົມ ສັງຄົມນິຍົມຂະຫຍາຍຕົວມີການພົວພັນດ້ານສັງຄົມແບບງອກງາມ, ການເພີ່ມທະວີຄວາມເປັນປຶກແຜ່ນ-ແໜ້ນຫນາດ້ານສັງຄົມ, ຄວາມເປັນເອກະພາບດ້ານການເມືອງ-ສັງຄົມແລະແນວຄິດຂອງສັງຄົມ. ສຳລັບຂົງເຂດດ້ານຈິດໃຈແລ້ວ ມີລັກສະນະພິເສດຄືລະດັບຂະຫຍາຍຕົວສູງໃນດ້ານວິທະຍາສາດ, ວັດທະນະທຳ, ການສຶກສາ,ການແຜ່ຂະຫຍາຍໂລກະທັດທີ່ມີວິທະຍາສາດຂອງລັດທິມາກ-ເລນິນ.

ໄລຍະສູງສຸດຂອງຮູບຖານຈັດຕັ້ງແບບກອມມູນິດນິຍົມ ແມ່ນກອມມູນິດນິຍົມບໍລິບູນ. ຄວາມດີເລີດຂອງຮູບຖານຈັດຕັ້ງແບບກອມມູນິດນິຍົມຢູ່ບ່ອນວ່າ ມັນອຳນວຍຄວາມ ອາດສາມາດຢ່າງບໍ່ມີຂອບເຂດໃຫ້ແກ່ການຂະຫຍາຍຕົວແບບມີແຜນການ ແລະ ສົມສ່ວນໃນທຸກໆດ້ານຂອງຊີວິດສັງຄົມ, ສ້າງທຸກໆປະຖົມ-ປັດໃຈໃຫ້ແກ່ການຂະຫຍາຍຕົວແບບມີອິດສະຫລະພາບ ແລະ ຮອບດ້ານ ຂອງຄົນ. ກອມມູນິດນິຍົມແມ່ນການເລີ່ມຕົ້ນຄວາມກ້າວໜ້າທາງສັງຄົມທີ່ໃຫມ່ທາງດ້ານຄຸນນະພາບ. ຄວາມກ້າວໜ້າທາງສັງຄົມ ດຳເນີນໄປໂດຍປາສະ ຈາກຄວາມເປັນປໍລະປັກດ້ານສັງຄົມ ແລະ ຊົນຊັ້ນ, ເພາະວ່າຄວາມກ້າວໜ້ານຳຜົນດີມາໃຫ້ຊາວຜູ້ອອກແຮງງານທຸກຄົນ. ຈຸດພິເສດຂອງຄວາມກ້າວໜ້າທາງ

## ພາກທີ ສີ່

## ໂຄງປະກອບຊົນຊັ້ນ-ສັງຄົມ ໃນສັງຄົມ ແລະການພົວພັນ ດ້ານຊົນຊາດ.

ລະຫວ່າງຜູ້ຄົນທີ່ດຳລົງຊີວິດໃນສັງຄົມ ມີຄວາມແຕກຕ່າງກັນດ້ານ ທຳມະຊາດ ( ເພດ, ໄວ, ເຊື້ອຊາດ ), ກໍ່ຄືຄວາມແຕກຕ່າງກັນດ້ານສັງຄົມ ແລະ ຊົນຊາດ. ກົງກັນຂ້າມ ກັບຄວາມແຕກຕ່າງດ້ານທຳມະຊາດ ຄວາມແຕກຕ່າງດ້ານຊົນຊາດ ແລະ ສັງຄົມ ແມ່ນໝາກຜົນຂອງການຂະຫຍາຍຕົວ ທາງປະຫວັດສາດຂອງສັງຄົມ. ເຊັ່ນຕົວຢ່າງ ຄວາມແຕກຕ່າງດ້ານຊົນຊັ້ນ ໄດ້ປະກົດຕົວຂຶ້ນມາພ້ອມກັນກັບການພັງທະລາຍ ຂອງລະບອບປະຖົມບູຮານ, ພ້ອມກັນກັບການປະກົດຕົວຂອງກຳມະສິດເອກະເທດ, ຄວາມບໍ່ສະເໝີພາບ ດ້ານເສດຖະກິດ, ການກົດຂີ່ຂູດຮີດ. ຄວາມແຕກຕ່າງດ້ານຊົນຊາດ ລະຫວ່າງຄົນ ໄດ້ປະກົດຕົວຂຶ້ນມາ ພ້ອມກັນກັບສ້າງຕັ້ງລັດທິທຶນນິຍົມ.

### ໑. ໂຄດວົງ, ກົກເຫລົ່າ, ເຜົ່າຊົນ, ປະຊາຊາດ

ຮູບແບບຊຸມລຸມຂອງຄົນ ແບບເກົ່າແກ່ທີ່ສຸດ ແມ່ນໂຄດວົງ ແລະກົກເຫລົ່າ. ຊຸມລຸມໂຄດວົງ ໄດ້ກຳເນີດຂຶ້ນ ພ້ອມກັນກັບການວິວັດເກີດມີຄົນຂຶ້ນມາ. ຝ . ອັງແກນ ໄດ້ໄຈ້ແຍກ ຈຸດພິເສດ ແລະ ທາດແທ້ຂອງການກຳເນີດໂຄດວົງ ຢູ່ໃນປຶ້ມນິພົນທີ່ຊື່ວ່າ: "ກົກເຄົ້າຂອງຄອບຄົວ, ກຳມະສິດສ່ວນຕົວ ແລະລັດ".

ໂຄດວົງ ແມ່ນການເຕົ້າໂຮມບັນດາຍາດຕິພີ່ນ້ອງຮ່ວມສາຍເລືອດດຽວກັນ ທີ່ກຳເນີດຈາກປູ່ຍ່າຕາຍາຍດຽວກັນ. ໃນເບື້ອງຕົ້ນຈຳນວນພົນໃນໂຄດວົງ ບໍ່

ຫລາຍ (໓໐-໕໐ ຄົນ), ຫລັງຈາກນັ້ນໄດ້ເລີ່ມຕົ້ນເພີ່ມທະວີຂຶ້ນ. ຈຸດພິເສດຂອງໂຄດວົງ ແມ່ນ: ໑) ຊື່ລວມຕາມຊື່ຂອງມານດາ ຜູ້ໃຫ້ກຳເນີດ ແກ່ໂຄດວົງ ໃນສະໄໝ ມານດາສິດທິລາດ ແລະ ຕາມຊື່ຂອງບິດາຜູ້ເປັນຫົວໜ້າ - ໂຄດວົງ ໃນສະໄໝ ບິດາສິດທິລາດ; ໒) ພາສາລວມ; ໓) ຮີດຄອງປະເພນີ ແລະ ມູນເຊື້ອລວມ; ໔) ພິທີການ ແລະ ການເຊື່ອຖືທາງສາສະໜາ. ໂຄດວົງ ດຳເນີນເສດຖະກິດຮ່ວມກັນ ບົນພື້ນຖານກຳມະສິດລວມໝູ່ແລະການແຈກຢາຍຢ່າງເທົ່າທຽມກັນ. ສະພາທີ່ປະກອບດ້ວຍຜູ້ຊາຍ ແລະ ແມ່ຍິງ ທີ່ມີອາຍຸເຕັມກະສຽນທຸກຄົນນັ້ນ ເປັນຜູ້ນຳພາໃນໂຄດວົງ. ສະພາດັ່ງກ່າວ ເປັນຜູ້ຄັດເລືອກ ແລະ ປົດຫົວໜ້າໂຄດວົງ ແລະ ຫົວໜ້າການທະຫານ ໃນໂຄດວົງ. ການສົມລົດກັນພາຍໃນໂຄດວົງຖືກເກືອດຫ້າມ.

ໃນໄລຍະຕົ້ນ ຂອງສັງຄົມປະຖົມບູຮານ ແມ່ຍິງມີບົດບາດນຳໜ້າໃນຊີວິດດ້ານເສດຖະກິດ. ການເປັນພີ່ນ້ອງກັນ ກຳນົດຕາມສາຍຂອງຜູ້ເປັນແມ່. ສຳລັບປະຊາຊົນຫລາຍເຜົ່າໃນສະໄໝປະຖົມບູຮານແລ້ວ ອັນນີ້ໄດ້ນຳ ໄປເຖິງການປົກຄອງໂດຍແມ່ຍິງຜູ້ເປັນມານດາໃນສັງຄົມຄື ມານດາສິດທິລາດ. ຫລັງຈາກນັ້ນ, ໃນເມື່ອແຮງງານຂອງຜູ້ຊາຍໄດ້ກາຍເປັນສິ່ງຕົ້ນຕໍ ແລະ ຕັດສິນແລ້ວ ບິດາສິດທິລາດ ໄດ້ຂຶ້ນມາປ່ຽນແທນ ມານດາສິດທິລາດ, ໃນການ ປົກຄອງຂອງບິດາສິດທິລາດ ເຊື້ອສາຍໃນໂຄດວົງ ໄດ້ຂຶ້ນຕາມສາຍຂອງຜູ້ເປັນບິດາ. ວົງລົມໂຄດວົງ ແມ່ນໄລຍະທີ່ຈຳເປັນໃນການຂະຫຍາຍຕົວ ຂອງມວນມະນຸດ. ຈຸດພິເສດຂອງມັນມີຢູ່ໃນໝູ່ປະຊາຊົນທຸກຊາດ: ເຊັ່ນ ຊາວ ກະເຣັກ, ຊາວໂຣແມງ, ຊາວຊະລາບ, ຊາວອິນເດຍແດງ ບູຮານແລະອື່ນໆ.

ໂຄດວົງ ໄດ້ເຕົ້າໂຮມກັນເຂົ້າເປັນກົກເຫລົ່າທີ່ມີເຊື້ອສາຍ, ພາສາແລະດິນແດນອັນດຽວກັນ. ໂຄດວົງ ແລະ ກົກເຫລົ່າໄດ້ຄົງຢູ່ໃນລະບອບປະຖົມບູຮານ ແລະ ມີບົດບາດອັນໃຫຍ່ຫລວງ ໃນການຂະຫຍາຍຕົວຂອງສັງຄົມ.ຫາກແຕ່ເງື່ອນໄຂດ້ານເສດຖະກິດ ໄດ້ກ້າວລົ້ມຮູບແບບການຈັດຕັ້ງຄົນແບບໂຄດວົງ -ກົກເຫລົ່າ, ແລະ ຮູບແບບດັ່ງກ່າວ ໄດ້ກາຍເປັນກຳລັງຖ່ວງດຶງ ການຂະຫຍາຍຕົວ ແລະ ໄດ້ພົ້ນສະໄໝໄປໃນດ້ານປະຫວັດສາດ, ເສດເຫລືອ ຂອງລະບອບໂຄດວົງ-ກົກເຫລົ່າ ທີ່ຍັງມີຢູ່ໃນບາງປະເທດ ຈົນເຖິງປະຈຸບັນນີ້ແມ່ນ ຜົນຂອງການຂະຫຍາຍຕົວ ທາງດ້ານປະຫວັດສາດທີ່ບໍ່ສະໝ່ຳ ສະເໝີ.

ເຜົ່າຈີນ ໄດ້ຂຶ້ນມາປ່ຽນແທນຮູບແບບຮວມກຸ່ມຂອງຄົນແບບໂຄດວົງ- ກົກເຫລົ່າ. ບັນດາເຜົ່າຈີນ ໄດ້ກຳເນີດຂຶ້ນ ໂດຍການເຕົ້າໂຮມບັນດາ ໂຄດວົງ ແລະ ກົກເຫລົ່າເປັນຕົ້ນຕໍ. ໂດຍແຕກຕ່າງກັນກັບໂຄດວົງແລ້ວ ເຜົ່າຈີນບໍ່ໄດ້ຈັດຕັ້ງຂຶ້ນບົນພື້ນຖານສາຍກ່ຽວພັນແບບພີ່ນ້ອງຮ່ວມສາຍເລືອດດຽວກັນ, ກ່ອນອື່ນໝົດ ແມ່ນໄດ້ຈັດຕັ້ງຂຶ້ນ ບົນພື້ນຖານເນື້ອທີ່, ພາສາ, ວັດທະນະທຳລວມກັນ ແລະ ສາຍພົວພັນດ້ານເສດຖະກິດທີ່ບໍ່ທັນຂະຫຍາຍຕົວປານໃດເທື່ອ. ໃນເຂດແດນຕ່າງໆເທິງໜ່ວຍພິພົບ ບັນດາເຜົ່າຈີນໄດ້ກຳເນີດຂຶ້ນມາ ໃນໄລຍະປະຫວັດສາດ ທີ່ແຕກຕ່າງກັນ. ເຜົ່າຈີນໃນຖານະເປັນຊຸມຊົນແບບປະຫວັດ - ສາດ ຍັງຄົງມີຢູ່ຈົນເຖິງປະຈຸບັນນີ້.

ພ້ອມກັນກັບການຂະຫຍາຍຕົວ ຂອງລັດທິທຶນນິຍົມ ເຜົ່າຈີນສ່ວນຫຼວງຫຼາຍໄດ້ກາຍເປັນປະຊາຊາດ. ໂດຍແຕກຕ່າງກັບເຜົ່າຈີນແລ້ວ ປະຊາຊາດ ມີລັກສະນະໝັ້ນຄົງກວ່າ. ປະຫວັດສາດ ເຄີຍຮູ້ກໍລະນີເປັນຈຳນວນຫລວງຫລາຍ- ໃນເມື່ອບັນດາເຜົ່າຈີນໄດ້ແຕກແຍກກັນອອກ, ເຊື່ອມເຂົ້າກັບເຜົ່າຈີນແລະປະຊາຊາດອື່ນໆ.

ບົດບາດທີ່ຕັດສິນຊີ້ຂາດ ໃນການສ້າງຕັ້ງ ແລະ ຂະຫຍາຍຕົວ ຂອງປະ-ຊາຊາດນັ້ນ ໄດ້ແກ່ປັດໄຈດ້ານເສດຖະກິດ: ເຊັ່ນ ການລົບລ້າງລັກສະນະກະແຈກກະຈາຍແບບສັກດີນາແຕ່ລະກ້າວ, ການສ້າງຕັ້ງຕະຫລາດເອກະພາບ . ດັ່ງນີ້ ລັກສະນະລວມໃນຊີວິດເສດຖະກິດ, ໄດ້ສະແດງຕົວເປັນຈຸດພິເສດທີ່ສຳຄັນທີ່ສຸດຂອງປະຊາຊາດ. ເປັນຄັ້ງທຳອິດທີ່ວິທະຍາສາດສັງຄົມ ຕາມແບບລັດທິມາກໄດ້ໄຈ້ແຍກຄວາມເຂົ້າໃຈແບບວິທະຍາສາດ ກ່ຽວກັບປະຊາຊາດ. ປະຊາຊາດແມ່ນຊຸມຊົນແບບປະຫວັດສາດຂອງຄົນ ທີ່ໄດ້ປະກອບຂຶ້ນມາບົນພື້ນຖານລັກສະນະລວມທີ່ໝັ້ນຄົງໃນດ້ານຊີວິດເສດຖະກິດ, ເນື້ອທີ່, ພາສາ, ລັກສະນະຊາດ ທີ່ສະແດງອອກໃນບັນດາຈຸດພິເສດດ້ານວັດທະນະທຳ, ຈິດສຳນຶກ - ແລະ ຈິດຕະສາດ.

ບໍ່ຄວນສັບປົນຄົນເລປະຊາຊາດກັບເຊື້ອຊາດ. ຄວາມແຕກຕ່າງກັນ ດ້ານເຊື້ອຊາດ ແມ່ນຈຸດພິເສດຮູບນອກດ້ານຊີວະສາດຂອງຄົນ.ການປະກົດຕົວຂອງເຊື້ອຊາດພົວພັນກັບການຂະຫຍາຍຕົວສະໄໝເດີກດຳບັນ ຂອງຄົນ ແລະ ສັງຄົມມະນຸດ. ໃນສະໄໝນັ້ນ ໃນໄລຍະທີ່ຄົນສະໄໝໃໝ່ພວມໄດ້ຮັບການສ້າງ

ຕັ້ງຂຶ້ນມາ ການປະກົດຕົວຂອງເຊື້ອຊາດຂອງຄົນ ກໍ່ພວມດຳເນີນໄປເຊັ່ນກັນ, ໝາຍຄວາມວ່າ ໄດ້ເກີດມີຄວາມແຕກຕ່າງກັນ ດ້ານຮ່າງກາຍແລະຕົນຕົວ . ການເກີດມີຄວາມແຕກຕ່າງເຫຼົ່ານີ້ ໄດ້ຕິດພັນກັບເງື່ອນໄຂດ້ານພູມສາດແລະ ດິນຟ້າອາກາດຂອງຊີວິດຂອງຄົນໃນສະໄໝປະຖົມບູຮານ ຊຶ່ງໃນໄລຍະຫລາຍ ພັນປີພາຍໃຕ້ລະດັບຂະຫຍາຍຕົວດ້ານກຳລັງ ແຫ່ງການຜະລິດ ທີ່ຕ່ຳທີ່ສຸດ ນັ້ນ ດຳເນີນຊີວິດແບບເປັນຈຸເປັນໜ່ວຍ ແລະ ຕັດແຍກອອກຈາກກັນ. ຈຸດພິເສດ ດ້ານເຊື້ອຊາດ ທີ່ປະກົດຕົວຂຶ້ນມາໃນເງື່ອນໄຂດັ່ງກ່າວນັ້ນໄດ້ມີລັກສະນະປອງ ກັນຕົວເພື່ອໃຫ້ສອດຄ່ອງກັບສະພາບແວດລ້ອມ (ເຊັ່ນສີຂອງຜິວ, ຮູບກະໂຫຼກ ຫົວ, ດັງ, ສີຂອງຜົມ ແລະ ອື່ນໆ). ການຄົ້ນຄວ້າວິທະຍາສາດ ໄດ້ ພິສູດ ຢ່າງໜັກແໜ້ນວ່າ ບໍ່ມີຄວາມແຕກຕ່າງ ຢ່າງໃດໃນວິທີນຶກຄິດ, ໃນຄວາມສາ ມາດ ດ້ານຈິດໃຈ ແລະ ຮ່າງກາຍຂອງຄົນ ທີ່ມີເຊື້ອຊາດ ແຕກຕ່າງກັນ.

ບັນດານັກແນວຄິດນາຍທຶນປະຕິການ ໂຄສະນາທິດສະດີທີ່ຝືນວິທະຍາສາດ ວ່າດ້ວຍເຊື້ອຊາດທີ່ "ສູງ" ແລະ "ຕ່ຳ" ຄືປະກົດວ່າມີເຊື້ອຊາດຈຳພວກ - ໜຶ່ງ (ເຊິ່ງເປັນເຊື້ອຊາດທີ່ "ສູງ". ) ໄດ້ຮັບການມອບໝາຍຈາກກະໂຕ ທຳມະຊາດ ໃຫ້ເປັນຜູ້ປົກຄອງ, ສ່ວນເຊື້ອຊາດອື່ນໆ (ທີ່ "ຕ່ຳ")ເປັນຜູ້ຖືກ ປົກຄອງ. ຢູ່ສະຫະລັດອາເມລິກາ ແລະ ບາງລັດທຶນນິຍົມອື່ນໆ ມີການແຜ່ຂະ ຫຍາຍການຈຳແນກເຊື້ອຊາດຢ່າງກວ້າງຂວາງ, ໝາຍຄວາມວ່າ,ການໜີບ ເຕັງ ແລະ ປາບປາມຜູ້ຄົນທີ່ບໍ່ເປັນຊາວຜິວຂາວ.

ແນວຄິດຈຳແນກເຊື້ອຊາດ ເວລາໃດກໍ່ຮັບໃຊ້ຜົນປະໂຫຍດຂອງພວກກົດຂີ່ ຂູດຮີດ. ໃນເງື່ອນໄຂສະໄໝໃໝ່ ບັນດານັກແນວຄິດນາຍທຶນພະຍາຍາມ - ຢາກພິສູດ ການທີ່ປະຊາຊົນບັນດາປະເທດລ່າເມືອງຂຶ້ນໃນອະດີດບໍ່ມີການກຽມ ພ້ອມດ້ານຈິດຕະສາດ ໃນການຂະຫຍາຍຕົວຢ່າງເປັນເອກະລາດ. ຫາກ ແຕ່ ຄວາມຫລ້າຫລັງທາງດ້ານເສດຖະກິດຂອງປະຊາຊົນ ທີ່ບໍ່ແມ່ນເຊື້ອຊາດ ຜິວ ຂາວນັ້ນ ບໍ່ແມ່ນຍ້ອນສີຂອງຜິວຫລືຜົມຂອງພວກເຂົາເຈົ້າ, ຫາກແມ່ນຜົນຂອງ ການກົດຂີ່ຂົ່ມເຫັງຂອງລະບອບລ່າເມືອງຂຶ້ນ ທີ່ໄດ້ໜີບເຕັງພວກເຂົາເຈົ້າໃນ ຊົ່ວໄລຍະ ຫລາຍສະຕະວັດມາແລ້ວ. ໃນປະຈຸບັນນີ້ ພາຍຫລັງທີ່ໄດ້ ປົດປ່ອຍ ອອກຈາກແອກປົກຄອງຂອງຈັກກະພັດນິຍົມແລ້ວ, ປະຊາຊົນໃນປະເທດ ລ່າ ເມືອງຂຶ້ນ ແລະ ປະເທດສະລາດ ໃນອະດີດ ໄດ້ພັດທະນາເສດຖະກິດແລະ

ວັດທະນະທຳຂອງຕົນຢ່າງໄດ້ຮັບຜົນດີ. ປະຊາຊົນໃນບັນດາປະເທດທີ່ໄດ້ກ້າວຂຶ້ນສູ່ເສັ້ນທາງສັງຄົມນິຍົມນັ້ນ ເດີນຕາມເສັ້ນທາງແຫ່ງຄວາມກ້າວໜ້າໃນຈັງຫວະຄວາມໄວເປັນພິເສດ.

ໃນຍຸກປະຈຸບັນນີ້ ມີປະຊາຊາດສອງປະເພດ: ທຶນນິຍົມ ແລະ ສັງຄົມນິຍົມ, ເຊິ່ງເປັນສອງປະຊາຊາດທີ່ກົງກັນຂ້າມກັນໃນດ້ານພື້ນຖານເສດຖະກິດ-ສັງຄົມ, ໃນດ້ານໂຄງຮ່າງຊົນຊັ້ນ, ລະບອບການເມືອງ ແລະ ແນວຄິດ ຈິດໃຈ.

ປະຊາຊາດທຶນນິຍົມ ປະກົດຕົວຂຶ້ນພ້ອມກັບການກໍ່ຕັ້ງລັດທິທຶນນິຍົມ. ພື້ນຖານເສດຖະກິດຂອງປະຊາຊາດທຶນນິຍົມ ແມ່ນວິທີ ການຜະລິດແບບທຶນນິຍົມ, ການພົວພັນແຫ່ງການຜະລິດແບບທຶນນິຍົມ. ເຫດການຕົວຈິງທີ່ວ່າ ທ່າມກາງຂະບວນວິວັດແຫ່ງການປະກົດຕົວຂອງປະຊາຊາດນາຍທຶນ ແມ່ນນາຍທຶນ ເປັນກຳລັງນຳພາ, ອັນທີ່ໄດ້ປະຮ່ອງຮອຍໄວ້ໃນໂສມໜ້າດ້ານສັງຄົມ-ການເມືອງ ແລະດ້ານຈິດໃຈຂອງປະຊາຊາດດັ່ງກ່າວ.

ໃນເງື່ອນໄຂທຶນນິຍົມ ປະຊາຊາດຖືກແບ່ງອອກເປັນພາກສ່ວນທີ່ ປໍລະປັກກັນ ເຊັ່ນຜູ້ກົດຂີ່ຂູດຮີດ ແລະ ຜູ້ຖືກກົດຂີ່ຂູດຮີດ. ການຕໍ່ສູ້ຊົນຊັ້ນດຳເນີນ ໄປພາຍໃນປະຊາຊາດຢ່າງເປັນປະຈຳ. ເລນິນ ເຄີຍເວົ້າວ່າ ໃນແຕ່ລະປະຊາຊາດ ໃນສັງຄົມນາຍທຶນມີສອງປະຊາຊາດ ຄືປະຊາຊາດຂອງພວກນາຍທຶນ , ເຈົ້າທີ່ດິນ, ໝາຍຄວາມວ່າ ປະຊາຊາດຂອງຜູ້ກົດຂີ່ຂົ່ມເຫັງ ແລະ ປະຊາຊາດຂອງຜູ້ຖືກກົດຂີ່ຂົ່ມເຫັງ.

ຄວາມອາຄາດບາດໝາງກັນ ລະຫວ່າງປະຊາຊາດ, ຄວາມບໍ່ສະເໝີພາບ, ຄວາມບໍ່ເຊື່ອໝັ້ນເຊິ່ງກັນ ແລະ ກັນ ແລະ ການປະທະກັນ ແມ່ນຄູ່ເດີນທາງທີ່ຫຼີກເວັ້ນບໍ່ໄດ້ຂອງທຶນນິຍົມ. ອັນນີ້ໄດ້ສະແດງອອກໃນລະບົບ ແນວຄິດຂອງລັດທິຊາດນິຍົມ. ໂດຍອີງໃສ່ລັດທິຊາດນິຍົມ ພວກນາຍທຶນພະຍາຍາມອ້າງເຫດອ້າງຜົນວ່າ ເປັນໄປໄດ້ ທີ່ຈະມີສັນຕິພາບລະຫວ່າງ ຊົນຊັ້ນພາຍໃນປະຊາຊາດ, ສາມາດກໍ່ຄວາມຂັດແຍ່ງຂຶ້ນ ລະຫວ່າງຊາວຜູ້ອອກແຮງງານຊົນຊາດຕ່າງໆ, ໂຄສະນາຊວນເຊື່ອວ່າ ຈຸດປະສົງອັນລັບແລບແບບນາຍທຶນຂອງຕົນແມ່ນເປັນຂອງທົ່ວທັງຊາດ, ແລະ ສາມາດພິສູດຄວາມ ຖືກຕ້ອງຂອງລັດທິລ່າເມືອງຂຶ້ນ. ລັດທິຊາດນິຍົມຂອງບັນດາປະຊາຊາດທີ່ຖືກ ກົດຂີ່ຂົ່ມ

ເຫັງໄດ້ປະກົດຕົວອອກໃນຮູບແບບລັດທິໂຊແວງ ມະຫາອຳນາດ, ທີ່ພິສູດຄວາມຖືກຕ້ອງຂອງຄວາມດີເລີດຂອງປະຊາຊາດນີ້ເໜືອປະຊາຊາດນັ້ນ ແລະການຢຶດຄອງເອົາປະຊາຊົນອື່ນເປັນອາຫານ.

ວ.ອີ.ເລນິນ ໄດ້ອົບຮົມກ່ຽວກັບຄວາມຈຳເປັນຕ້ອງມີທັດສະນະ ປະຫວັດສາດຕົວຈິງ ໃນການຕີລາຄາລັດທິຊາດນິຍົມ. ໃນໄລຍະແຫ່ງການຕໍ່ສູ້ຕ້ານສັກດີນາເພື່ອຄວາມສາມັກຄີພາຍໃນຊາດ ແລະ ສ້າງຕັ້ງລັດເອກະລາດນັ້ນ ລັດທິຊາດນິຍົມຂອງນາຍທຶນທີ່ໜຸ່ມນ້ອຍ ໄດ້ມີບົດບາດອັນກ້າວໜ້າແບບທຽບຖານ. ແຕ່ຫລັງຈາກສ້າງຕັ້ງການປົກຄອງຂອງຕົນແລ້ວ ນາຍທຶນໄດ້ເລີ່ມຕົ້ນ ໜູນໃຊ້ລັດທິຊາດນິຍົມເພື່ອກົດຂີ່ຂົ່ມເຫັງປະຊາຊົນຊາດອື່ນໆ, ເພື່ອຕ້ານກັບ ຄວາມເປັນເອກະພາບສາກົນ ຂອງຂະບວນການປະຕິວັດ.

ໃນການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນບັນດາປະເທດເມືອງຂຶ້ນ ແລະປະເທດສະລາດ ລັດທິຊາດນິຍົມຂອງບັນດາປະຊາຊາດທີ່ຖືກກົດຂີ່ຂົ່ມເຫັງ ມີສ່ວນເປັນປະຊາທິປະໄຕລວມແບບກ້າວໜ້າດ້ານປະຫວັດສາດ ທີ່ແນໃສ່ ເພື່ອຕ້ານຈັກກະພັດນິຍົມ. ຫາກແຕ່ໃນລັດທິຊາດນິຍົມຂອງປະຊາຊາດທີ່ຖືກກົດຂີ່ຂົ່ມເຫັງຍັງມີດ້ານທີ່ສອງ ທີ່ສະແດງເຖິງແນວຄິດ ແລະ ຜົນປະໂຫຍດຂອງວົງການປົກຄອງ ຂອງພວກກົດຂີ່ຂູດຮີດ ແລະ ປະຕິການ.

ບັນດາປະຊາຊາດສັງຄົມນິຍົມ ໄດ້ສ້າງຕັ້ງຂຶ້ນມາໃນເງື່ອນໄຂສັງຄົມນິຍົມ, ໂດຍດັດປ່ຽນຈາກບັນດາປະຊາຊາດ ແລະ ເຜົ່າຊົນທີ່ໄດ້ຄົງຢູ່ໃນສັງຄົມ ທຶນນິຍົມ. ບັນດາປະຊາຊາດສັງຄົມນິຍົມ ໄດ້ສ້າງຂຶ້ນບົນພື້ນຖານ ການຮ່ວມມືແລະການຊ່ວຍເຫລືອກັນທາງດ້ານເສດຖະກິດ, ພວກເຂົາເຈົ້າບໍ່ແບ່ງອອກເປັນ ຜູ້ກົດຂີ່ຂູດຮີດ ແລະ ຜູ້ຖືກກົດຂີ່ຂູດຮີດ, ຫາກປະກອບຂຶ້ນມາຈາກຊົນຊັ້ນ ແລະຊັ້ນຄົນ ຜູ້ອອກແຮງງານໃນສັງຄົມ ເຊິ່ງມີການພົວພັນຖານມິດສະຫາຍ ແລະມີຜົນປະໂຫຍດພື້ນຖານລວມກັນ ແລະ ຜູກຮັດດ້ວຍນ້ຳໃຈສາກົນສັງຄົມນິຍົມ.

ບັນດາປະຊາຊາດທີ່ແນວນມີຢູ່ໃນສະຫະພາບໂຊວຽດ ແລະ ບັນດາ ປະເທດ ສັງຄົມນິຍົມອື່ນໆ. ສ.ສ.ສ.ຊ. ແມ່ນລັດເອກະພາບ ແບບສະຫະພາບທີ່ມີຫລາຍຊົນຊາດ, ສ້າງຂຶ້ນບົນພື້ນຖານຫລັກການຮ່ວມກັນເປັນສະຫະພັນແບບສັງຄົມນິຍົມ, ເປັນຜົນຂອງການຕັດສິນດ້ວຍຕົນເອງຢ່າງມີອິດສະຫລະ ພາບຂອງບັນດາປະຊາຊາດ ແລະ ການທ້ອນໂຮມເຂົ້າກັນ ລະຫວ່າງພວກເຂົາ -

ເຈົ້າດ້ວຍຄວາມສະໝັກໃຈ. ເພື່ອດຳເນີນການປົກປັກຮັກສາໝາກຜົນຂອງມະຫາປະຕິວັດເດືອນຕຸລາຢ່າງໄດ້ຮັບຜົນດີ ແລະ ເພື່ອກ້າວຂຶ້ນສູ່ສັງຄົມນິຍົມຢ່າງໄວທີ່ສຸດນັ້ນ ຊາວຜູ້ອອກແຮງງານໃນບັນດາສາທາລະນະລັດຊົນຊາດ ໂຊວຽດໄດ້ມຸ່ງໜ້າສູ່ການເຕົ້າໂຮມເຂົ້າເປັນລັດດຽວກັນ. ເມື່ອວັນທີ ໓໐ ທັນວາ ປີ ໑໙໒໒ ດ້ວຍເຈດຈຳນົງຂອງປະຊາຊົນທົ່ວທັງລັດເຊຍໂຊວຽດ ໄດ້ມີການສ້າງຕັ້ງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດຂຶ້ນມາເປັນລັດສະຫະພາບ-ເອກະພາບ ທີ່ມີຫລາຍຊົນຊາດຂອງກຳມະກອນ ແລະ ຊາວນາລັດທຳອິດ ໃນໂລກ. ສະຫະພາບໂຊວຽດ ໄດ້ປະກົດຕົວຕໍ່ໜ້າທົ່ວໂລກເປັນຄືຄອບຄົວ ຂອງບັນດາສາທາລະນະລັດ ທີ່ມີສິດສະເໝີພາບ ແລະ ມີພະລາດອນພາບ.

ພວກຕ້ານກອມມູນິດພາກັນອາດພາບ ຄວາມເປັນເອກະພາບດ້ານ ການເມືອງ-ສັງຄົມ ຂອງສັງຄົມໂຊວຽດ ຄືການສູນເສຍຫລືຈຳກັດອະທິປະໄຕແຫ່ງຊາດ. ໃນຕົວຈິງແລ້ວ ມີແຕ່ພາຍໃຕ້ລະບອບສັງຄົມນິຍົມເທົ່ານັ້ນ ບັນດາ ປະຊາຊາດຈິ່ງມີສິດອະທິປະໄຕຢ່າງແທ້ຈິງ. ວ.ອີ.ເລນິນ ໄດ້ຂຽນວ່າ: "ພວກເຮົາໄດ້ມອບສາທາລະນະລັດຫລືເຂດປົກຄອງຕົນເອງຂອງຕົນເອງ ໃຫ້ແກ່ພູກພູກຊົນຊາດທີ່ບໍ່ແມ່ນຊາວລັດເຊຍ" ໑). ປະຈຸບັນນີ້ສະຫະພາບໂຊວຽດ ເຕົ້າໂຮມເອົາ ໑໕ ສາທາລະນະລັດສະຫະພາບທີ່ມີສິດສະເໝີພາບ, ໒໐ ສາທາລະນະລັດປົກຄອງຕົນເອງ, ໘ ເຂດປົກຄອງຕົນເອງ.

ໃນເງື່ອນໄຂແຫ່ງລັດສັງຄົມນິຍົມທີ່ມີຫລາຍຊົນຊາດ ການພົວພັນລະຫວ່າງປະຊາຊາດມີສອງຈຸດພິເສດຕົ້ນຕໍຄື: ການຂະຫຍາຍຕົວ ແລະ ຄວາມຈະເລີນຮຸ່ງເຮືອງຂອງບັນດາປະຊາຊາດ ແລະ ການໃກ້ຊິດກັນຂອງພວກເຂົາເຈົ້າ.

ພ້ອມກັບການບັນລຸໄລຍະ ສັງຄົມນິຍົມທີ່ຂະຫຍາຍຕົວຢູ່ ສ.ສ.ສ.ຊ.ຍ້ອນຜົນຂອງຄວາມຈະເລີນຮຸ່ງເຮືອງ ແລະ ການໃກ້ຊິດກັນລະຫວ່າງບັນດາປະຊາຊາດພາຍໃນຄວາມເປັນລັດເອກະພາບສັງຄົມນິຍົມນັ້ນ ໄດ້ເກີດມີ ຊົນລົມຄົນແບບໃໝ່ທາງສັງຄົມ ແລະ ທາງສາກົນຄືປະຊາຊົນໂຊວຽດ. ຊົນລົມນີ້ ມີປະເທດຊາດ, ດິນແດນ, ເສດຖະກິດທີ່ເປັນອັນໜຶ່ງອັນດຽວກັນ,ມີລະບອບການການເມືອງ, ໂລກະທັດລັດທິມາກ-ເລນິນ ແລະ ວັດທະນະທຳທີ່ເປັນ ອັນ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ. ເຫລັ້ມທີ ໕໕, ໜ້າ ໑໕໙.

ຫນຶ່ງອັນດຽວກັນ.

ໃນສຸດທ້າຍ ຂະບວນວິວັດແຫ່ງການໃກ້ຊິດກັນລະຫວ່າງປະຊາຊາດໄດ້ສຳເລັດດ້ວຍການເຊື່ອມຈອດເຂົ້າກັນ. ຫາກແຕ່ການເຊື່ອມຈອດເຂົ້າກັນຂອງບັນດາປະຊາຊາດ, ການຜ່ານຜ່າຄວາມແຕກຕ່າງກັນ ລະຫວ່າງພວກເຂົາ ເຈົ້າ ແມ່ນຂະບວນວິວັດທີ່ຍາວນານທີ່ສຸດ. ບັນດານັກລັດທິມາກ ຕໍ່ສູ້ເພື່ອບໍ່ໃຫ້ ກີດຂວາງຂະບວນວິວັດແຫ່ງການໃກ້ຊິດກັນລະຫວ່າງປະຊາຊາດ, ທັງຕໍ່ສູ້ ເພື່ອບໍ່ໃຫ້ຮີບຮ້ອນສ້າງເງື່ອນໄຂແບບປອມແປງ ເພື່ອຊຸກຍູ້ຂະບວນວິວັດດັ່ງກ່າວ ຈະແມ່ນດ້ວຍວິທີການໃດ ກໍຕາມ.

ຂະບວນວິວັດແຫ່ງການໃກ້ຊິດກັນລະຫວ່າງປະຊາຊາດ, ຊົນຊາດ ແລະ ເຜົ່າຊົນນັ້ນແມ່ນເລື່ອງຖືກຕ້ອງຕາມກົດເກນລວມແຫ່ງການຂະຫຍາຍຕົວ ຂອງທຸກໆສັງຄົມທີ່ມີຫລາຍຊົນຊາດທີ່ພວມກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ. ມັນຍັງແມ່ນເລື່ອງທີ່ຖືກຕ້ອງຕາມກົດເກນແຫ່ງການຂະຫຍາຍຕົວໃນປະເທດ - ລາວ. ທ່ານໄກສອນ ພົມວິຫານຂຽນວ່າ: "ປະເທດເຮົາເປັນປະເທດ ມີພົນລະເມືອງຫນ້ອຍ ແຕ່ພັດມີຫລາຍຊົນຊາດ, ຊົນເຜົ່າ. ໃນປະຫວັດສາດ, ປະເທດເຮົາຍັງຖືກຕັດແບ່ງເປັນເວລາຍາວນານ ຍ້ອນລະບອບສັກດີນາທີ່ຍັງບໍ່ທັນລວມສູນ. ສະນັ້ນ, ສະຕິປະເທດຊາດເປັນເອກະພາບອັນຫນຶ່ງອັນດຽວ ຈຶ່ງມີອັນຖືກຈຳກັດ; ໃນດ້ານອື່ນ, ຊົນຊັ້ນປົກຄອງ ແລະ ຈັກກະພັດນິຍົມ ໂດຍສະເພາະຢ່າງຍິ່ງ ຈັກກະພັດອາເມລິກາໄດ້ສວຍໃຊ້ຈຸດພິເສດດັ່ງກ່າວນັ້ນ ເພື່ອແບ່ງແຍກບັນດາຊົນຊາດໃນປະເທດເຮົາ ດ້ວຍການຄວັດເລິກຄວາມ ອາຄາດບາດຫມາງ, ຄວາມລະແວງສົງໄສກັນທີ່ໄດ້ມີມາແຕ່ເຫິງນານແລ້ວ ລະຫວ່າງບັນດາຊົນຊາດ, ທັງໃຊ້ທຸກວິທີການອັນເລິກແລບ ໂຫດຫຽມປຸກປັ່ນລັດທິ ຊາດນາຍທຶນປະຕິການ ເພື່ອຕ້ານຢັນມ້າງເພການປະຕິວັດ. ດ້ວຍເຫດນັ້ນ, ເມື່ອໃນຂອງຫນ້າທີ່ປະຕິວັດຊາດຢູ່ໃນປະເທດເຮົາຈຶ່ງບໍ່ພຽງແຕ່ຕ້ອງໂຄ່ນລົ້ມຈັກກະພັດຜູ້ຮຸກຮານ ແລະ ພວກລູກມື, ຍາດເອົາເອກະລາດມາໃຫ້ຊາດເທົ່ານັ້ນ , ຫາກຍັງຕ້ອງ ສ້າງສະຕິປະເທດຊາດລາວເປັນອັນຫນຶ່ງອັນດຽວ, ສ້າງແນວຄິດສະເຫມີພາບ ລະຫວ່າງຊົນຊາດ, ປັບປຸງກ້ອນກຳລັງສາມັກຄີລະຫວ່າງຊົນຊາດ ແລະ ເຜົ່າຊົນພາຍໃນຄອບຄົວໃຫຍ່ແຫ່ງຊາດລາວອັນຫນຶ່ງອັນດຽວ,ຕັ້ງຫນ້າແກ້ໄຂອົນກິດຕາຍຕົວ, ຄວາມອາຄາດບາດຫມາງ ແລະ ຄວາມ ຫ່າງ

ໄກເຊິ່ງກັນ ແລະ ກັນລະຫວ່າງຊົນຊາດ, ເສີມຂະຫຍາຍມູນເຊື້ອອັນ ດີງາມ ແລະ ຄວາມສາມາດຂອງບັນດາຊົນຊາດໃນພາລະກິດຕໍ່ສູ້ກູ້ຊາດ ແລະ ສ້າງຊາດຢ່າງສຸດຂີດ. ນີ້ແມ່ນເນື້ອໃນອັນໜຶ່ງທີ່ສຳຄັນທີ່ສຸດ ເພື່ອປຸກລະດົມປະຊາຊົນບັນດາຊົນຊາດໃນທົ່ວປະເທດໃຫ້ສາມັກຄີເປັນກຸ່ມໜຶ່ງກ້ອນດຽວພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານສັດຕູຂອງຊາດ.[໑]

ນັບແຕ່ໄລຍະທົ່ວທີ່ຂອງການຕໍ່ຕ້ານລັດທິລ່າເມືອງຂຶ້ນເປັນຕົ້ນມາພ.ປ.ປ.ລ. ໄດ້ຕັ້ງບັນຫາກ່ຽວກັບຄວາມສາມັດຄີລະຫວ່າງບັນດາຊົນເຜົ່າເປັນ ໜ້າທີ່ຕົ້ນຕໍໃນການເຄື່ອນໄຫວຂອງຕົນ. ພາຍຫລັງການປົດປ່ອຍປະເທດຊາດ ພ.ປ ປ.ລ. ໄດ້ມີບາດກ້າວທີ່ສຳຄັນ ເພື່ອຂະຫຍາຍເສດຖະກິດ ແລະ ວັດທະນະທຳ, ການສຶກສາ ແລະ ສາທາລະນະສຸກໃນບໍລິເວນຊົນຊາດ, ກໍ່ສ້າງແລະ ບຳລຸງພະນັກງານ, ບຳລຸງຖັນແຖວປັນຍາຊົນໃນ ບັນດາຊົນຊາດ, ສ້າງເງື່ອນ ໄຂເພື່ອ ລົບລ້າງການໂຕນກັນ ລະຫວ່າງບັນດາຊົນຊາດໄປເທື່ອລະກ້າວ,ປະຕິບັດສິດສະເໝີພາບຢ່າງແທ້ຈິງ ລະຫວ່າງບັນດາຊົນເຜົ່າໃນໝູ່ກຸງ ຂົງເຂດ ແລະ ເສີມຂະຫຍາຍການປະກອບສ່ວນອັນໃຫຍ່ຫລວງຂອງໝູ່ກຸງຊົນຊາດໃນທົ່ວປະເທດເຂົ້າໃນ ພາລະກິດອັນຍິ່ງໃຫຍ່ຂອງການປະຕິວັດ. "ໃນຂະບວນ ວິວັດແຫ່ງການກໍ່ສ້າງກ້ອນກຳລັງສາມັກຄີແຫ່ງຊາດນັ້ນ, ບໍ່ວ່າເວລາໃດພັກເຮົາກໍ່ໄດ້ຢືນໝັ້ນໃນຫລັກໝັ້ນທັດສະນະຂອງຊົນຊັ້ນກຳມະກອນເພື່ອແກ້ໄຂ ບັນຫາຊົນຊາດ, ຕ້ານບັນດາທ່າອຽງຜິດພາດ, ທ່າອຽງ "ຊາດອ້າຍໃຫຍ່" ກໍ່ຄືທ່າອຽງ "ຊາດຄັບແຄບ"[໒].

ໜຶ່ງໃນບັນດາຫລັກການພື້ນຖານຂອງແນວຄິດ ແລະ ການເມືອງຂອງຊົນຊັ້ນກຳມະກອນ, ຂອງພັກຂອງຊົນຊັ້ນກຳມະກອນນັ້ນ ແມ່ນລັດທິສາກົນ ກຳມາຊີບ. ມັນສະແດງເຖິງຄວາມສາມັກຄີສາກົນລະຫວ່າງຊາວຜູ້ອອກແຮງງານໃນປະເທດຕ່າງໆ ໃນການຕໍ່ສູ້ຕ້ານລັດທິທຶນນິຍົມ, ເພື່ອປົດປ່ອຍຊາດ ແລະ ສັງຄົມ, ເພື່ອກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມ. ພື້ນຖານຂອງລັດທິ ສາ

---

໑) ໄກສອນ ພົມວິຫານ "ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ ." ສຳນັກພິມຈຳໜ່າຍ ສ.ປ.ປ.ລ. ໑໙໗໙, ໜ້າ ໒໓, ໒໔, ໒໕.

໒) ເບິ່ງປຶ້ມເຫລັ້ມດຽວກັນ. ໜ້າ ໒໖.

ກົນນິຍົມກຳມາຊີບ ແມ່ນລັກສະນະລວມດ້ານພົນປະໂຫຍດ ຂອງຊົນຊັ້ນ ກຳມາຊີບ ແລະ ເປົ້າໝາຍສຸດທ້າຍໃນການຕໍ່ສູ້ຂອງຊົນຊັ້ນກຳມາຊີບ ໂດຍບໍ່ຂຶ້ນກັບເລື່ອງທີ່ວ່າ ຜູ້ຕາງໜ້າຂອງຊົນຊັ້ນກຳມາຊີບ ຈະຢູ່ໃນລັດໃດ ແລະ ເປັນຊົນຊາດໃດ. ລັດທິສາກົນນິຍົມ ໄດ້ກຳເນີດຂຶ້ນໃນໄລຍະຕົ້ນຂອງຂະບວນ ການກອມມູນິດສາກົນ. ກ.ມາກ,ຟ.ອັງແກນ, ວ.ອີ.ເລນິນ ໄດ້ສ້າງ ພື້ນຖານຂອງລັດທິສາກົນນິຍົມຢູ່ໃນບົດນິພົນຂອງພວກເພິ່ນ. ມາກ ແລະ ອັງແກນ ໄດ້ແຕ່ງຄຳຂວັນຂອງລັດທິສາກົນນິຍົມ ທີ່ໄດ້ກາຍເປັນ ຄຳຂວັນທີ່ຮູ້ກັນ ໃນທົ່ວໂລກຄື: " ຊາວກຳມາຊີບໃນທຸກປະເທດ ຈົ່ງສາມັກຄີກັນ !".

ຄຽງຄູ່ກັບຄວາມຮູ້ກ່ຽວກັບ "ລັດທິສາກົນກຳມາຊີບ " ໃນປຶ້ມລັດທິ ມາກ ຍັງໃຊ້ຄວາມເວົ້າ " ລັດທິສາກົນສັງຄົມນິຍົມ" ຢ່າງກວ້າງຂວາງ.ຕາມເນື້ອໃນແລ້ວມັນກວ້າງກວ່າຊຸດົມສົມບູນກວ່າລັດທິສາກົນກຳມາຊີບ. ມັນແມ່ນ ການເສີມຂະຫຍາຍແນວຄິດລັດທິສາກົນກຳມາຊີບ ໃນເງື່ອນໄຂສະໄໝໃໝ່. ລັດທິສາກົນສັງຄົມນິຍົມບໍ່ພຽງແຕ່ກວມລວມເອົາການພົວພັນລະຫວ່າງຊົນຊັ້ນກຳມາຊີບໃນທຸກໆປະເທດເທົ່ານັ້ນ, ແຕ່ຍັງກວມລວມທັງການພົວພັນລະຫວ່າງບັນດາປະຊາຊາດສັງຄົມນິຍົມ ແລະ ບັນດາຊົນເຜົ່າ ພາຍໃນລັດສັງຄົມນິຍົມທີ່ມີຫຼາຍຊົນຊາດ* , ລະຫວ່າງບັນດາລັດທີ່ພວມກໍ່ສ້າງສັງຄົມນິຍົມ.

ນັກລັດທິມາກທີ່ແທ້ຈິງທຸກຄົນ ລ້ວນແຕ່ແມ່ນນັກລັດທິສາກົນນິຍົມ. ພ້ອມກັນນັ້ນ ຄວາມໝາຍພິເສດໄດ້ແກ່ຄວາມສັກສິດຂອງລັດທິສາກົນນິຍົມກຳມາຊີບ - ແລະ ສັງຄົມນິຍົມ, ແລະ ການໝູນໃຊ້ມັນເຂົ້າໃນການເຄື່ອນໄຫວວຽກງານຕົວຈິງປະຈຳວັນຂອງພັກ ແລະ ຂອງນັກກອມມູນິດແຕ່ລະຄົນເວົ້າສະເພາະ . ວ.ອີ.ເລນິນ ເນັ້ນໜັກວ່າ ສິ່ງທີ່ຕົ້ນຕໍ ແລະ ສຳຄັນຢູ່ບ່ອນວ່າ ຕ້ອງຮູ້ ເປັນນັກສາກົນນິຍົມໃນຕົວຈິງ ໃນກາລະເວລາທີ່ຫຍຸ້ງຍາກທີ່ສຸດ ໑) .

ລະຫວ່າງສະຫະພາບໂຊວຽດ ແລະ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ມີສາຍພົວພັນແບບລັດທິສາກົນນິຍົມອັນແທ້ຈິງ.ໃນການອອກແຮງ-

---

* ສະຫະພາບໂຊວຽດ ແມ່ນລັດທີ່ມີຫລາຍຊົນຊາດ. ໃນສະຫະພາບໂຊວຽດມີຫລາຍກວ່າ໑໐໐ຊົນຊາດແລະເຜົ່າຊົນ,ພົນລະເມືອງລາວກໍມີຫລາຍຊົນຊາດແຕ່ຊົນຊາດລາວ ມີຈຳນວນຫລາຍກວ່າ ၅໐%.

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ,ເຫລັ້ມທີ ໓໑, ໜ້າ ໑၅໘-໑၅໔.

ງານປະດິດສ້າງຂອງຕົນ ສ.ປ.ປ.ລ. ທີ່ພວມກໍ່ສ້າງພື້ນຖານສັງຄົມນິຍົມຢ່າງໜັ້ນແກ່ນນັ້ນ ໄດ້ອີງໃສ່ການຊ່ວຍເຫຼືອຖານອ້າຍນ້ອງຈາກ ສ.ສ.ສ.ຊ . ແລະ ບັນດາປະເທດໃນວົງຄະນາຍາດສັງຄົມນິຍົມ. ສ.ສ.ສ.ຊ. ແລະ ສ.ປ.ປ.ລ. ພວມປະຕິບັດບັນດາສັນຍາອັນຄົບຊຸດວ່າດ້ວຍການຮ່ວມມືດ້ານ ເສດຖະກິດ ແລະ ວິທະຍາສາດເຕັກນິກລະຫວ່າງສອງລັດຖະບານ.

ປະເທດລາວອ້າຍນ້ອງ ຕີລາຄາສູງຕໍ່ມິດຕະພາບກັບສະຫະພາບໂຊວຽດ. ທ່ານໄກສອນ ພົມວິຫານ ໃຫ້ຂໍ້ສັງເກດວ່າ: "ພວກເຮົາ ດີອົກດີໃຈທີ່ສຸດທີ່ບົນພື້ນຖານລັດທິສາກົນກຳມາຊີບ ພັກເລນິນ ແລະ ປະຊາຊົນໂຊວຽດໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນຢ່າງເປັນປະຈຳແກ່ພາລະກິດການປະຕິວັດຂອງພວກຂ້າພະເຈົ້າ, ໂດຍສະເພາະແມ່ນໃນໄລຍະພາຍຫຼັງການສ້າງ ຕັ້ງ ສ.ປ.ປ.ລ. ອັນນີ້ແມ່ນເງື່ອນໄຂທີ່ສຳຄັນສຳລັບໄຊຊະນະຂອງການປະຕິ ວັດລາວ ໃນຂັ້ນຕໍ່ໄປ ".

ວົງຄະນາຍາດສັງຄົມນິຍົມ ທີ່ແຜ່ຂະຫຍາຍໄປເປັນລະບົບສັງຄົມນິຍົມແຫ່ງໂລກນັ້ນ ໝາຍເຖິງສັງກາດໃໝ່ບົນເສັ້ນທາງປະຫວັດສາດແຫ່ງການ ຂະຫຍາຍຕົວຂອງມວນມະນຸດ ແລະ ແມ່ນແບບສະບັບຂອງສະມາຄົມໃນອະນາຄົດຂອງປະຊາຊົນທີ່ມີອິດສະຫລະພາບ.

## ໔. ຊົນຊັ້ນ ແລະ ການພົວພັນລະຫວ່າງຊົນຊັ້ນ

ໂຄງປະກອບສັງຄົມມີລັກສະນະສະເພາະສຳລັບແຕ່ລະຮູບຖານຈັດຕັ້ງ ສັງຄົມ-ເສດຖະກິດ. ປັດໄຈທີ່ຕັດສິນຊີ້ຂາດຂອງມັນ ແມ່ນວິທີການຜະລິດ ຊັບສິນວັດຖຸ. ວິທີການຜະລິດມີການປ່ຽນແປງໂຄງປະກອບຂອງສັງຄົມກໍ່ປ່ຽນແປງໄປເຊັ່ນກັນ.

ບັນຫາກ່ຽວກັບຊົນຊັ້ນ ແລະ ການພົວພັນລະຫວ່າງຊົນຊັ້ນແມ່ນໜຶ່ງໃນຈຳນວນບັນຫາທີ່ສຳຄັນໃນວິທະຍາສາດວ່າດ້ວຍສັງຄົມຂອງລັດທິມາກ. ກ່ຽວກັບບັນຫາທີ່ວ່າ ສັງຄົມແບ່ງອອກເປັນຊົນຊັ້ນ ແລະ ລະຫວ່າງຊົນຊັ້ນມີການຕໍ່ສູ້ກັນນັ້ນ ເປັນທີ່ຮັບຮູ້ກັນມາແຕ່ກ່ອນການກຳເນີດຂອງລັດທິມາກພຸ້ນ ຫາກແຕ່ ແມ່ນ

ກະໂຕລັດທຶນາກຂອງ ໄດ້ຢືນຢູ່ໃນທັດສະນະຄວາມເຂົ້າໃຈແບບວັດຖຸນິຍົມກ່ຽວກັບປະຫວັດສາດ ແລະ ເປັນຄັ້ງທຳອິດທີ່ໄດ້ສ້າງຕັ້ງຄວາມຮັບຮູ້ທີ່ມີວິທະຍາ - ສາດ ກ່ຽວກັບຊົນຊັ້ນທີ່ມີຄວາມໝາຍກຳມະວິທີວິທະຍາ ອັນໃຫຍ່ຫລວງ, ໄດ້ຊີ້ແຈງທີ່ຕັ້ງຕົວຈິງຂອງການຕໍ່ສູ້ຊົນຊັ້ນໃນການຂະຫຍາຍຕົວຂອງສັງຄົມ, ກຳນົດເສັ້ນທາງ ແລະ ເງື່ອນໄຂການຂະຫຍາຍຕົວຂອງມວນມະນຸດຂຶ້ນສູ່ສັງຄົມ ທີ່ບໍ່ມີຊົນຊັ້ນ.

ວ.ອິ.ເລນິນ ໄດ້ນິຍາມຊົນຊັ້ນຢ່າງຮອບດ້ານວ່າ: "ຊົນຊັ້ນແມ່ນກຸ່ມ ຄົນຈຳນວນຫລວງຫລາຍທີ່ແຕກຕ່າງກັນ ທາງດ້ານຖານະໃນລະບົບການຜະລິດອັນແນ່ນອນໃນປະຫວັດສາດ, ແຕກຕ່າງກັນໃນດ້ານການພົວພັນຂອງພວກເຂົາ - ເຈົ້າ (ສ່ວນຫລາຍໄດ້ຮັບການຢັ້ງຢືນ ແລະ ກຳນົດໄວ້ໃນກົດໝາຍ ) ຕໍ່ພາຫະນະການຜະລິດ, ແຕກຕ່າງກັນໃນດ້ານບົດບາດຂອງພວກເຂົາເຈົ້າ ຢູ່ໃນການຈັດຕັ້ງອອກແຮງງານຂອງສັງຄົມ. ດັ່ງນັ້ນຈຶ່ງແຕກຕ່າງກັນໃນດ້ານວິທີຮັບເອົາຊັບສິນສັງຄົມ ແລະ ອັດຕາສ່ວນຂອງຊັບສິນດັ່ງກ່າວ" ໑).

ໃນການນິຍາມຊົນຊັ້ນ ເລນິນ ໄດ້ຊີ້ແຈງໃຫ້ເຫັນບັນດາລັກສະນະ ພິເສດດ້ານເສດຖະກິດທີ່ສຳຄັນທີ່ສຸດຂອງຊົນຊັ້ນ. ຫາກແຕ່ຄວາມແຕກຕ່າງດ້ານ ຊົນຊັ້ນ ຍັງຄົງມີຢູ່ໃນຂົງເຂດການເມືອງ, ແນວຄິດ, ຊີວິດຄວາມເປັນຢູ່ ແລະ ອື່ນໆ. ແຕ່ລະຊົນຊັ້ນມີລະບົບແນວຄິດຂອງຕົນ, ມີສິນທຳຂອງຕົນ, ມີວັດທະນະທຳ. ແຕ່ໃນສຸດທ້າຍ ຄວາມແຕກຕ່າງ ດ້ານເສດຖະກິດເຊິ່ງແມ່ນ ຄວາມແຕກຕ່າງທີ່ເປັນທາດແທ້ຫລາຍກວ່າໝູ່ ໃນຈຳນວນຄວາມແຕກຕ່າງລະຫວ່າງຊົນຊັ້ນນັ້ນ ເປັນສິ່ງກຳນົດໃຫ້ແກ່ບັນດາຊົນຊັ້ນ. ອີກດ້ານໜຶ່ງ ໃນຈຳນວນລັກສະນະພິເສດຂອງຊົນຊັ້ນທີ່ ວ.ອິ.ເລນິນ ໄດ້ຊີ້ແຈງອອກມານັ້ນ ລັກສະນະ ພິເສດທີ່ສຳຄັນກວ່າໝູ່ ແມ່ນການພົວພັນທີ່ແຕກຕ່າງກັນຂອງຄົນຕໍ່ກຳມະສິດ.ລັກສະນະພິເສດອັນນີ້ກຳນົດຄວາມແຕກຕ່າງອື່ນໆ. ເພາະຍ້ອນວ່າໃນສັງຄົມທຶນນິຍົມ ພາຫະນະການຜະລິດຕົ້ນຕໍຕົກຢູ່ໃນກຳມືຂອງນາຍທຶນ, ນາຍທຶນຈຶ່ງມີ ຖານະຄອບຄອງໃນສັງຄົມ ບໍ່ພຽງແຕ່ໃນດ້ານເສດຖະກິດເທົ່ານັ້ນ, ແຕ່ຍັງຄອບຄອງດ້ານການເມືອງ ແລະ ແນວຄິດອີກ.

---

໑) ວ.ອິ.ເລນິນ ນິພົນຄົບຊຸດ, ເຫລັ້ມທີ ໓໙, ໜ້າ ໑໕.

ຈາກຄວາມຮັບຮູ້ວ່າ ບັນດາຊົນຊັ້ນແຕກຕ່າງກັນ ກ່ອນອື່ນໝົດ ແມ່ນຢູ່ໃນຄວາມແຕກຕ່າງໃນການພົວພັນດ້ານກຳມະສິດຕໍ່ພາຫະນະການຜະລິດ ແລະບັນດາຊົນຊັ້ນໄດ້ກຳເນີດຂຶ້ນມາພ້ອມກັບການກຳເນີດກຳມະສິດເອກະເທດ; ຈາກນັ້ນຈຶ່ງມີຂໍ້ຄວາມສະຫລຸບແບບປະຕິວັດທີ່ສຳຄັນທີ່ສຸດ. ເພື່ອລົບລ້າງຊົນຊັ້ນ, ເພື່ອກໍ່ສ້າງສັງຄົມທີ່ບໍ່ມີຊົນຊັ້ນ ຕ້ອງລົບລ້າງກຳມະສິດເອກະເທດຕໍ່ພາຫະນະ ການຜະລິດ, ຕ້ອງ "ເຮັດໃຫ້ພົນລະເມືອງທຸກຄົນມີຄວາມເທົ່າທຽມກັນໃນການພົວພັນກັບພາຫະນະການຜະລິດຂອງທົ່ວທັງສັງຄົມ..." ໑) ດັ່ງ ວ.ອີ. ເລນິນ ເຄີຍໄດ້ຂຽນໄວ້. ດ້ວຍເຫດນັ້ນ ໃນໂຄງການດຳເນີນງານຂອງພັກກອມມູນິດ ແລະ ພັກກຳມະກອນທຸກໆພັກ ເວລາໃດກໍ່ຍົກຂໍ້ຮຽກຮ້ອງໃຫ້ມີການຫັນປ່ຽນພາຫະນະການຜະລິດເປັນແບບລວມໝູ່ສັງຄົມນິຍົມນັ້ນ ເປັນຂໍ້ຮຽກຮ້ອງ ລຳດັບໜຶ່ງຢູ່ສະເໝີ.

ຊົນຊັ້ນບໍ່ຄົງຕົວຢູ່ຢ່າງຕະຫລອດການ. ບັນຫາກ່ຽວກັບການປະກົດຕົວຂອງຊົນຊັ້ນໄດ້ຮັບການໄຈ້ແຍກຢ່າງລະອຽດໃນບົດນິພົນ "ອັງຕິ ດູຣິງ" ແລະ "ກົກເຄົ້າຂອງຄອບຄົວ, ກຳມະສິດສ່ວນຕົວ ແລະ ລັດ" ຂອງ ຟ.ອັງແກນ. ຊົນຊັ້ນໄດ້ປະກົດຕົວຂຶ້ນມາໃນໄລຍະທີ່ລະບອບປະຖົມບູຮານເກີດແຕກແຍກ. ສັງຄົມທຳອິດທີ່ມີຊົນຊັ້ນໄດ້ປະກົດຕົວຂຶ້ນຢູ່ເອຢິບ ແລະ ເມໂຊໂປຕາມີ ໃນສະໄໝທ້າຍສະຕະວັດທີ ໔ ຫາ ຕົ້ນສະຕະວັດທີ ໓ ກ່ອນ ຄ.ສ. ປະຖົມປັດໄຈລວມທີ່ສຸດ ທີ່ພາໃຫ້ບັນດາຊົນຊັ້ນປະກົດຕົວຂຶ້ນມານັ້ນ ແມ່ນການຂະຫຍາຍຕົວ ຂອງກຳລັງແຫ່ງການຜະລິດທີ່ໄດ້ນຳໄປເຖິງການກຳເນີດເກີດມີຜະລິດຕະພັນ ສ່ວນເກີນ *, ການແບ່ງງານ, ການແລກປ່ຽນ ແລະ ເກີດມີກຳມະສິດສ່ວນຕົວຕໍ່ພາຫະນະການຜະລິດ. ບົດບາດທີ່ສຳຄັນທີ່ສຸດໃນການກໍ່ຕັ້ງຊົນຊັ້ນນັ້ນໄດ້ແກ່ - ການແບ່ງງານ; ໃນເບື້ອງຕົ້ນການລ້ຽງສັດ ແລະ ປູກຝັງໄດ້ແບ່ງອອກເປັນຂະແໜງການສະເພາະ, ຫລັງຈາກນັ້ນ ແຮງງານຫັດຖະກຳ ໄດ້ແຍກອອກ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໒໔, ໜ້າ ໓໖໓.

* ຜະລິດຕະພັນສ່ວນເກີນ ແມ່ນຜະລິດຕະພັນທີ່ຊາວຜູ້ອອກແຮງງານ ໄດ້ຜະລິດອອກມາ ນອກເໜືອຈາກຜະລິດຕະພັນ ທີ່ຈຳເປັນສຳລັບການລ້ຽງຊີບ ກະໂຕກຳມະກອນ ແລະ ຄອບຄົວຂອງເຂົາ.

ຈາກແຮງງານກະສິກຳ, ແລະ ໃນທີ່ສຸດ, ແຮງງານດ້ວຍມັນສະໝອງ ແຍກອອກຈາກແຮງງານດ້ວຍຮ່າງກາຍ. ພ້ອມກັນກັບການແບ່ງງານໃນສັງຄົມແລະການແລກປ່ຽນແລ້ວ ກຳມະສິດສ່ວນຕົວ ຕໍ່ພາຫະນະການຜະລິດ ກໍໄດ້ຮັບການຂະຫຍາຍຕົວ ແລະ ໄດ້ມາແທນບ່ອນກຳມະສິດລວມໝູ່ແບບປະຖົມບູຮານ.

ໃນຫລາຍປະເທດສັງຄົມຂ້າທາດ ແມ່ນສັງຄົມທຳອິດທີ່ມີຊົນຊັ້ນ.ຊົນຊັ້ນເຈົ້າທາດ ເຊິ່ງແມ່ນຊົນຊັ້ນກົດຂີ່ຂູດຮີດນັ້ນ ໃນເບື້ອງຕົ້ນໄດ້ສ້າງຕັ້ງຂຶ້ນມາຍ້ອນກອມມູນປະຖົມບູຮານ ມີການພັນແຍກຄົນອອກເປັນເຈົ້າຊຸມນູມນາຍ ເຊັ່ນພະສົງ, ເຈົ້າກົກ ແລະ ແມ່ທັບ. ຊົນຊັ້ນທີ່ຖືກກົດຂີ່ຂູດຮີດ ເກີດມາຈາກ ຊະເລີຍເສິກທີ່ຖືກບັງຄັບໃຫ້ເປັນຂ້າທາດ ແລະ ຖັດຈາກນັ້ນກໍແມ່ນພີ່ນ້ອງ ແລະເພື່ອນຮ່ວມຊາດທີ່ປະສົບຄວາມຫລົ້ມຈົມ ແລະ ຕົກເປັນລູກໜີ້.

ໃນເຂດຕ່າງໆຂອງໂລກ ຂະບວນວິວັດແຫ່ງການປະກົດຕົວຂອງຊົນຊັ້ນ ມີລັກສະນະພິເສດຂອງແຕ່ລະເຂດ. ສຳລັບປະຊາຊົນຊາດຕ່າງໆແລ້ວໄລຍະເວລາຂອງການກຳເນີດເກີດມີ ຊົນຊັ້ນກໍຕ່າງກັນ. ສຳລັບປະຊາຊົນສ່ວນຫລວງຫລາຍແລ້ວ ເວລາແຫ່ງການຄົງຢູ່ຂອງບັນດາຊົນຊັ້ນ ແກ່ຍາວມາໄດ້ຫລາຍພັນປີແລ້ວ. ຫາກແຕ່ໃນຫລາຍປະເທດທີ່ ການຂະຫຍາຍຕົວດ້ານເສດຖະກິດ ຍັງຫລ້າຫລັງ ແລະ ຫາກໍໄດ້ຮັບການປົດປ່ອຍຈາກການເປັນເມືອງຂຶ້ນ ໃນເວລາບໍ່ດົນມານີ້ (ເຊັ່ນຕົວຢ່າງ ຢູ່ເຂດຮ້ອນຂອງທະວີບອາຟຣິກກາ.) ຂະບວນ ວິວັດແຫ່ງການກຳເນີດຊົນຊັ້ນໄດ້ສືບຕໍ່ມາຈົນເຖິງປະຈຸບັນນີ້.

ແຕ່ລະຮູບຖານຈັດຕັ້ງສັງຄົມ–ເສດຖະກິດ. (ນອກຈາກຮູບຖານຈັດຕັ້ງ - ແບບປະຖົມບູຮານ ) ລ້ວນແຕ່ມີຊົນຊັ້ນທີ່ແນ່ນອນ ແລະ ມີການພົວພັນ ລະຫວ່າງຊົນຊັ້ນ, ໝາຍຄວາມວ່າ ມີໂຄງປະກອບຊົນຊັ້ນທີ່ແນ່ນອນ. ໃນນັ້ນ ມີທັງຊົນຊັ້ນພື້ນຖານ, ທັງຊົນຊັ້ນທີ່ບໍ່ພື້ນຖານ. ຊົນຊັ້ນພື້ນຖານ ແມ່ນຊົນຊັ້ນທີ່ພົວພັນກັບວິທີການຜະລິດທີ່ມີການຄອບຄອງໃນສັງຄົມ ທີ່ກ່ຽວຂ້ອງ. ໃນສັງຄົມ ປໍລະປັກທາງຊົນຊັ້ນນັ້ນ ຊົນຊັ້ນພື້ນຖານແມ່ນຊົນຊັ້ນທີ່ເປັນເຈົ້າຂອງພາຫະນະ - ການຜະລິດ ແລະ ຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງທີ່ປໍລະປັກກັບມັນ. ຂ້າທາດ ແລະ ເຈົ້າທາດໃນສັງຄົມຂ້າທາດ, ຊາວນາ ແລະ ເຈົ້າ ສັກດີນາໃນສັງຄົມ ສັກດີນາ, ຊົນຊັ້ນກຳມາຊີບ ແລະ ນາຍທຶນໃນສັງຄົມທຶນນິຍົມນັ້ນ ຄືຊົນຊັ້ນພື້ນຖານໃນສັງຄົມທີ່ເປັນປໍລະປັກກັນ.

ນອກຈາກນັ້ນ ຍັງມີບັນດາຊົນຊັ້ນທີ່ບໍ່ພື້ນຖານ, ທີ່ບໍ່ພົວພັນກັບວິທີ ການຜະລິດທີ່ມີຖານະຄອບຄອງ (ຊາວຫັດຖະກອນເສລີ ໃນສັງຄົມຂ້າທາດ, ຊາວນາໃນສັງຄົມທຶນນິຍົມ ແລະ ອື່ນໆ). ຍັງມີຊຸມຄົນຕ່າງໆໃນສັງຄົມເຊັ່ນປັນຍາຊົນ ນັກບວດໃນສາດສະໜາ ແລະ ອື່ນໆ. ພາຍໃນຊົນຊັ້ນກໍ່ມີຄວາມບໍ່ສະໝໍ່າສະເໝີກັນດ້ານສັງຄົມ. ໝາຍຄວາມວ່າ, ປະກອບດ້ວຍຊຸມຄົນຕ່າງໆ ເຊັ່ນຕົວຢ່າງນາຍທຶນນ້ອຍ ແລະ ໃຫຍ່.

ໃນບາງປະເທດຍັງຄົງມີ ຊັ້ນວັນນະ ເຊິ່ງແມ່ນກຸ່ມຄົນທີ່ຄັບແຄບ ແລະຕັດຂາດອອກຈາກສັງຄົມ. ພວກເຂົາເຈົ້າແມ່ນປັດໄຈທີ່ສຳຄັນ ໃນການຖ່ວງ ດຶງການຂະຫຍາຍຕົວກ້າວໜ້າຂອງສັງຄົມ.

ການຕໍ່ສູ້ຊົນຊັ້ນແມ່ນລັກສະນະພິເສດສຳລັບທຸກໆສັງຄົມທີ່ມີການກົດຂີ່ຂູດຮີດ. ມາກ ແລະ ອັງແກລ ໄດ້ຊີ້ແຈງອອກໃນ "ຄຳຖະແຫລງການຂອງພັກ ກອມມູນິດ" ວ່າ ປະຫວັດສາດຂອງທຸກໆ ສັງຄົມທີ່ເປັນປໍລະປັກກັນ ລ້ວນແຕ່ແມ່ນປະຫວັດສາດແຫ່ງການຕໍ່ສູ້ຊົນຊັ້ນ. "ຄົນຜູ້ມີອິດສະຫລະພາບ ແລະ ຂ້າທາດ, ຂຸນນາງ ແລະ ສາມັນຊົນໃນສະໄໝ ໂຣແມງ, ເຈົ້າທີ່ດິນ ແລະ ຊາວນາ ຜູ້ເປັນທາດ, ນາຍຊ່າງ ແລະ ລູກຈ້າງ, ເວົ້າລວມແລ້ວ ຜູ້ກົດຂີ່ຂົ່ມເຫັງແລະຜູ້ຖືກກົດຂີ່ຂົ່ມເຫັງຢູ່ໃນສະພາບເປັນປໍລະປັກຕໍ່ກັນຕະຫລອດການ, ດຳເນີນການຕໍ່ສູ້ກັນຢ່າງບໍ່ຢຸດຢັ້ງ, ບາງຄັ້ງແມ່ນການຕໍ່ສູ້ທີ່ປິດລັບ, ບາງຄັ້ງແມ່ນການຕໍ່ສູ້ທີ່ເປີດເຜີຍ, ເຊິ່ງເວລາໃດກໍ່ສົ້ນສຸດລົງດ້ວຍການປະຕິວັດດັດແກ້ທົ່ວທັງ ສະຖາບັນແຫ່ງສັງຄົມ ຫລືສິ້ນສຸດລົງດ້ວຍ ການພັງທະລາຍຂອງບັນດາຊົນຊັ້ນ ທີ່ຕໍ່ສູ້ກັນ" ໑)

ເປັນຄັ້ງທຳອິດທີ່ລັດທິມາກ ໄດ້ອະທິບາຍສາຍເຫດ ແລະຕົ້ນກຳເນີດຂອງການຕໍ່ສູ້ຊົນຊັ້ນຢ່າງມີວິທະຍາສາດ, ໄດ້ພິສູດວ່າ ໃນໄລຍະອັນແນ່ນອນ ແຫ່ງການຂະຫຍາຍຕົວດ້ານສັງຄົມ ການຕໍ່ສູ້ຊົນຊັ້ນ ແມ່ນການຕໍ່ສູ້ທີ່ຖືກຕ້ອງຕາມກົດເກນ ແລະຫລີກເວັ້ນບໍ່ໄດ້ແລະຖ້າຫາກບໍ່ມີການຕໍ່ສູ້ ໃນສັງຄົມທີ່ເປັນປໍລະປັກລະຫວ່າງຊົນຊັ້ນແລ້ວ ຄວາມກ້າວໜ້າທາງສັງຄົມກໍ່ບໍ່ອາດຈະເປັນໄປໄດ້.

ບັນດານັກແນວຄິດຂອງນາຍທຶນ ຢ້ານກົວການຕໍ່ສູ້ຊົນຊັ້ນຂອງຊາວ ຜູ້ອອກ

---

໑) ກ.ມາກ ແລະ ຟ.ອັງແກລ. ບົດນິພົນ., ເຫລັ້ມທີ ໔, ໜ້າ ໔໒໔.

ແຮງງານ ແລ້ວພາກັນພະຍາຍາມຢາກພິສູດວ່າ ການຕໍ່ສູ້ດັ່ງກ່າວ ມີລັກສະນະບັງເອີນ, ແມ່ນອຸປະສັກຂອງຄວາມກ້າວໜ້າທາງສັງຄົມ. ໂດຍປະຕິເສດ - ຄວາມເສກສັນປັ້ນແຕ່ງຂອງນາຍທຶນກ່ຽວກັບວ່າການຕໍ່ສູ້ຊົນຊັ້ນມີການ ກະທົບທາງບໍ່ດີຕໍ່ຂະບວນວິວັດແຫ່ງປະຫວັດສາດ, ມາກ ແລະ ອັງແກນໄດ້ພິສູດຢ່າງມີວິທະຍາສາດວ່າ ການຕໍ່ສູ້ຊົນຊັ້ນ ແມ່ນກຳລັງຊຸກດັນຂອງການຂະຫຍາຍ ຕົວຂອງບັນດາຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ທີ່ມີຄວາມເປັນປໍລະປັກ. ໂດຍຜ່ານການຕໍ່ສູ້ຊົນຊັ້ນຈຶ່ງມີການຂ້າມຜ່ານຈາກລະບອບເສດຖະກິດ-ສັງຄົມທີ່ເກົ່າແກ່ ຫລ້າຫລັງຂຶ້ນສູ່ລະບອບເສດຖະກິດ-ສັງຄົມໃໝ່ ທີ່ກ້າວໜ້າກວ່າ. ຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດທີ່ເຊົາສອດຄ່ອງກັບກຳລັງແຫ່ງການຜະລິດນັ້ນ ຈະໄດ້ຮັບການແກ້ໄຂດ້ວຍ ການທັບມ້າງການພົວພັນແຫ່ງການຜະລິດຢ່າງສິ້ນເຊີງ ຜ່ານທາງຂະບວນວິວັດແຫ່ງການປະຕິວັດສັງຄົມ ເຊິ່ງແມ່ນຮູບແບບສູງສຸດຂອງການຕໍ່ສູ້ຊົນຊັ້ນ.

ໃນແຕ່ຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ທີ່ເປັນປໍລະປັກກັນ ການຕໍ່ສູ້ຊົນຊັ້ນມີຈຸດພິເສດສະເພາະ ທີ່ຂຶ້ນກັບວິທີການຜະລິດ, ຂຶ້ນກັບຈຸດພິເສດຂອງໂຄງປະກອບຊົນຊັ້ນໃນສັງຄົມ. ຖ້າສົມທຽບກັບການຕໍ່ສູ້ຂອງບັນດາຊົນຊັ້ນ ໃນຮູບຖານຈັດຕັ້ງອື່ນໆ ທີ່ມີມາກ່ອນແລ້ວນັ້ນ ການຕໍ່ສູ້ຊົນຊັ້ນຂອງຊາວກຳມາຊີບແມ່ນການຕໍ່ສູ້ທີ່ມີການຈັດຕັ້ງ ແລະ ຂະຫຍາຍຕົວກວ່າ.

ການຕໍ່ສູ້ຊົນຊັ້ນຂອງຊາວກຳມາຊີບ ຕ້ານນາຍທຶນມີສາມຮູບແບບພື້ນຖານຄືການຕໍ່ສູ້ດ້ານເສດຖະກິດ, ດ້ານການເມືອງ ແລະ ດ້ານແນວຄິດ.

ຮູບແບບທີ່ງ່າຍດາຍ ແລະ ມວນຊົນກຳມະກອນສາມາດເຂົ້າຮ່ວມນຳຢ່າງກວ້າງຂວາງທີ່ສຸດນັ້ນ ແມ່ນການຕໍ່ສູ້ດ້ານເສດຖະກິດ ເຊິ່ງແມ່ນການຕໍ່ສູ້ ຂອງຊົນຊັ້ນກຳມາຊີບ ເພື່ອປົວແປງຖານະທາງດ້ານວັດຖຸ ແລະ ເງື່ອນໄຂການ - ອອກແຮງງານຂອງຕົນ. ມັນອຳນວຍຄວາມສະດວກໃຫ້ແກ່ການດູດດຶງເອົາມະຫາຊົນຊາວກຳມາຊີບຈຳນວນຫລວງຫລາຍ ເຂົ້າຮ່ວມໃນການຕໍ່ສູ້ ແລະ ແມ່ນໂຮງຮຽນອົບຮົມການຈັດຕັ້ງທີ່ດີສຳລັບພວກເຂົາເຈົ້າ. ພ້ອມກັນນັ້ນ ການ ຕໍ່ສູ້ທາງດ້ານເສດຖະກິດມີລັກສະນະຈຳກັດ. ມັນບໍ່ໄດ້ວາງໜ້າທີ່ລົບລ້າງອຳນາດການປົກຄອງຂອງນາຍທຶນ. ຈຸດປະສົງຂອງການຕໍ່ສູ້ດັ່ງກ່າວ ບໍ່ແມ່ນເພື່ອ ລົບລ້າງການກົດຂີ່ຂູດຮີດ ຫາກແມ່ນພຽງແຕ່ເພື່ອຈຳກັດ ແລະ ຫລຸດຜ່ອນການກົດ

ຂູດຣີດເທົ່ານັ້ນ. ໂດຍໜູນໃຊ້ການຕໍ່ສູ້ທາງດ້ານເສດຖະກິດ ຊົນຊັ້ນ ກຳມາຊີບ ສາມາດປັບປຸງຖານະທາງດ້ານວັດຖຸຂອງຕົນໃຫ້ດີຂຶ້ນໜ້ອຍໜຶ່ງ, ບັງຄັບໃຫ້ນາຍທຶນຕ້ອງຜ່ອນສັ້ນຜ່ອນຍາວທາງດ້ານເສດຖະກິດບາງປະການ. ແຕ່ຊົນຊັ້ນກຳມາຊີບຈະສາມາດຕອບສະໜອງຜົນປະໂຫຍດອັນພື້ນຖານຂອງຕົນໃນດ້ານເສດຖະກິດ ແລະ ການເມືອງ, ປົດປ່ອຍຕົນອອກຈາກການກົດຂີ່ ຂູດຣີດຢ່າງຖາວອນນັ້ນ ມີແຕ່ຕ້ອງລົບລ້າງການປົກຄອງດ້ານການເມືອງຂອງນາຍທຶນ ແລະ ສ້າງຕັ້ງອຳນາດການປົກຄອງຂອງຕົນຂຶ້ນມາ ຄືພະເດັດການກຳມາ ຊີບເທົ່ານັ້ນ.

ເພື່ອບັນລຸຈຸດປະສົງດັ່ງກ່າວນີ້ ຊົນຊັ້ນກຳມາຊີບດຳເນີນການຕໍ່ສູ້ດ້ານການເມືອງ, ໂດຍນຳໃຊ້ບັນດາພາຫະນະທີ່ແຕກຕ່າງກັນທີ່ສຸດເຊັ່ນ: ການຢຸດງານດ້ານການເມືອງ ແລະ ການເດີນຂະບວນ, ການຕໍ່ສູ້ໃນສະພາ ແລະ ອື່ນໆ. ຫາກແຕ່ການສະແດງຕົວໃນຮູບການສູງສຸດຂອງການຕໍ່ສູ້ດ້ານການເມືອງ ນັ້ນແມ່ນການຕໍ່ສູ້ເພື່ອລົບລ້າງກະໂຕພື້ນຖານທຶນນິຍົມ, ຕໍ່ສູ້ເພື່ອ ອຳນາດການປົກຄອງແຫ່ງລັດຂອງຊົນຊັ້ນກຳມາຊີບ. ດ້ວຍເຫດນັ້ນ ການຕໍ່ສູ້ຊົນຊັ້ນດ້ານ ການເມືອງຂອງຊົນຊັ້ນກຳມາຊີບແມ່ນຮູບແບບສຳຄັນທີ່ສຸດຂອງການຕໍ່ສູ້.

ຄວາມໝາຍອັນໃຫຍ່ຫລວງໃນຂະບວນການປະຕິວັດຂອງຊົນຊັ້ນກຳມາຊີບໄດ້ແກ່ການຕໍ່ສູ້ດ້ານແນວຄິດ. ໝາຍຄວາມວ່າ ການຕໍ່ສູ້ຕ້ານກັບລະບົບ ແນວຄິດນາຍທຶນທີ່ປົກຄອງໃນສັງຄົມທຶນນິຍົມ ເພື່ອໄຊຊະນະຂອງລະບົບແນວຄິດສັງຄົມນິຍົມ ແລະ ຊົນຊັ້ນກຳມາຊີບ. ການຕໍ່ສູ້ດ້ານແນວຄິດຂຶ້ນກັບໜ້າທີ່ ການເມືອງ, ໜ້າທີ່ໂຄ່ນລົ້ມການປົກຄອງຂອງນາຍທຶນ ແລະ ສ້າງຕັ້ງ ອຳນາດການປົກຄອງຂອງຊົນຊັ້ນກຳມາຊີບ.

ບັນດານັກທິດສະດີນາຍທຶນ ແລະ ລັດທິແກ້ພາກັນປະກາດວ່າ ໃນ ເງື່ອນໄຂສະໄໝໃໝ່ນີ້ ການຕໍ່ສູ້ຊົນຊັ້ນຄືວ່າໄດ້ຫລຸດຜ່ອນລົງແລ້ວ, ລັກສະນະຄວາມເປັນປໍລະປັກກັນລະຫວ່າງຊົນຊັ້ນກໍໂຍະຍານລົງແດ່ແລ້ວ, ຊົນຊັ້ນກຳມະກອນກໍ່ໄດ້ສູນເສຍບົດບາດປະຕິວັດຂອງຕົນໄປແລ້ວ. ໃນຕົວຈິງ ການຕໍ່ສູ້ຊົນຊັ້ນ ໃນບັນດາປະເທດທຶນນິຍົມ ໄດ້ມີຂະໜາດອັນນັບມື້ນັບໃຫຍ່ຫລວງຂຶ້ນ. ຈຳນວນຜູ້ທີ່ເຂົ້າຮ່ວມໃນການຢຸດງານໃນໄລຍະຊຸມປີ ໑໙໗໐ ໄດ້ເພີ່ມຂຶ້ນຫລາຍກວ່າ - ໜຶ່ງສ່ວນສາມ ແລະ ມີຈຳນວນເຖິງ ໔໕໐ ລ້ານຄົນ.

ການຕໍ່ສູ້ຊົນຊັ້ນຂອງຊາວຜູ້ອອກແຮງງານໃນບັນດາປະເທດທຶນນິຍົມໃນຍຸກສະໄໝປະຈຸບັນນີ້ ດຳເນີນໄປໃນເງື່ອນໄຂທີ່ມີວິກິດການຮອບດ້ານແຫ່ງ ລັດທິທຶນນິຍົມທີ່ໄດ້ກ້າວສູ່ໄລຍະໃໝ່ ແລະ ໃນເງື່ອນໄຂທີ່ລະບົບສັງຄົມນິຍົມ ໂລກພວມ ກາຍເປັນປັດໄຈຕັດສິນຊີ້ຂາດໃນການຂະຫຍາຍຕົວຂອງໂລກ. ຂະບວນການກຳມະກອນໃນບັນດາປະເທດທຶນນິຍົມ ມີການພົວພັນຢ່າງບໍ່ຂາດສາຍ ກັບບັນດາກຳລັງໃນຂະບວນວິວັດແຫ່ງການປະຕິວັດໂລກໃນຍຸກສະໄໝຂອງ ພວກເຮົາ, ເຊັ່ນ ລະບົບສັງຄົມນິຍົມໂລກ, ຂະບວນການປົດປ່ອຍຊາດ.

ການຕໍ່ສູ້ຊົນຊັ້ນໃນສະໄໝປະຈຸບັນນີ້ຂອງຊາວຜູ້ອອກແຮງງານ ໃນບັນດາປະເທດນາຍທຶນ ມີຈຸດພິເສດທີ່ສຳຄັນບາງຈຸດ. ອັນນີ້ກ່ອນອື່ນໝົດແມ່ນລັກສະນະມະຫາຊົນຂອງການລຸກຮືຂຶ້ນ. ຫລາຍຄັ້ງຫລາຍຄາວ ການຢຸດງານໄດ້ມີລັກສະນະຊາດລວມ, ໄດ້ກວມລວມເອົາທົ່ວທັງປະເທດ. ຈຸດພິເສດອີກຈຸດ ໜຶ່ງຂອງການຕໍ່ສູ້ຊົນຊັ້ນໃນໄລຍະສຸດທ້າຍມານີ້ ແມ່ນລັກສະນະທົ່ວໄປຂອງມັນການສັ່ນສະເທືອນດ້ານຊົນຊັ້ນ ບໍ່ພຽງແຕ່ໄດ້ກວມລວມເອົາບັນດາປະເທດທຶນນິຍົມທີ່ຂະຫຍາຍຕົວເທົ່ານັ້ນ, ແຕ່ຍັງກວມລວມເອົາທັງບັນດາລັດໃນທະວີບອາເມລິກາລາຕິນ, ອາຊີ, ອາຟຣິກກາ ທີ່ຂະຫຍາຍຕົວຕາມເສັ້ນທາງທຶນນິຍົມ.

ຈຸດພິເສດສຳຄັນທີ່ສຸດຂອງຂະບວນການກຳມະກອນ ໃນສະໄໝ ປະຈຸບັນນີ້ແມ່ນການປະສານສົມທົບກັນລະຫວ່າງ ການຕໍ່ສູ້ຂອງຊົນຊັ້ນກຳມາຊີບເພື່ອສັງຄົມນິຍົມ ກັບຂະບວນການປະຊາທິປະໄຕຂອງມະຫາຊົນ ເພື່ອເຮັດໃຫ້ຊີວິດສັງຄົມທຸກດ້ານມີປະຊາທິປະໄຕ, ເພື່ອເຮັດໃຫ້ການຄຸ້ມຄອງການຜະລິດເປັນປະຊາທິປະໄຕ. ໃນຈຳນວນຄວາມຮຽກຮ້ອງດ້ານປະຊາທິປະໄຕ ທີ່ຕັ້ງສຳຄັນໄດ້ແກ່ການຕໍ່ສູ້ເພື່ອສັນຕິພາບ ແລະ ເພື່ອນຳໃຊ້ໝາກຜົນຂອງວິທະຍາສາດແລະເຕັກນິກເຂົ້າໃນຈຸດປະສົງ ເພື່ອສັນຕິພາບ, ເພື່ອຜົນປະໂຫຍດຂອງຊາວ ຜູ້ອອກແຮງງານ. ປົກປັກຮັກສາສັນຕິພາບ ຮັກສາການຄົງຢູ່ຂອງມວນມະນຸດ - ເທິງໜ່ວຍພິພົບນີ້ເປັນເລື່ອງທີ່ກ່ຽວຂ້ອງກັບທຸກໆຄົນ. ດ້ວຍເຫດນັ້ນ ບັນດາຊັ້ນຄົນທີ່ແຕກຕ່າງກັນທີ່ສຸດ ໃນພົນລະເມືອງ, ເຊັ່ນຊົນຊັ້ນກຳມະກອນ, ຊາວນາ, ປັນຍາຊົນ, ຊາວຫັດຖະກອນ, ພາກສ່ວນນາຍທຶນ ທີ່ມີທ່າອຽງ ກ້າວໜ້າ ລ້ວນແຕ່ພາກັນປະກອບສ່ວນເຂົ້າ ໃນການຕໍ່ສູ້ເພື່ອສັນຕິພາບ, ຊາວນາມີບົດບາດທີ່ສຳຄັນເປັນພິເສດ. ໃນບັນດາປະເທດພວມພັດທະນາ,ຊາວນາປະ

ກອບເປັນສ່ວນໃຫຍ່ຂອງພົນລະເມືອງ ແລະ ແມ່ນກຳລັງທີ່ຊຸກດັນຂະບວນການປົດປ່ອຍຊາດ ແລະ ເປັນພື້ນຖານສັງຄົມທີ່ສຳຄັນຂອງການປະຕິວັດ ຕ້ານຈັກກະພັດນິຍົມ ແລະ ຕ້ານສັກດີນາ.

ການເປີດກວ້າງພື້ນຖານສັງຄົມຂອງຂະບວນການປະຕິວັດ ໄດ້ສ້າງ ພື້ນຖານທີ່ໜາແໜ້ນໃຫ້ແກ່ແນວໂຮມເອກະພາບ ເພື່ອຕ້ານກັບນາຍທຶນຜູກຂາດ. ໃນເອກະສານກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ພັກກຳມະ - ກອນມີບາງຕອນກ່າວວ່າ: "ທ່າມກາງການຕໍ່ສູ້ຮ່ວມກັນເພື່ອຕ້ານການຜູກຂາດ ແລະ ຕ້ານຈັກກະພັດນິຍົມນັ້ນ ໄດ້ມີການສ້າງຕັ້ງປະຖົມປັດໄຈທີ່ອຳນວຍເງື່ອນໄຂໃຫ້ແກ່ການເຕົ້າໂຮມທຸກໆຂະບວນການປະຊາທິປະໄຕເຂົ້າໃນພັນທະ ພາບທາງການເມືອງ ທີ່ສາມາດຈຳກັດບົດບາດຂອງທຶນຜູກຂາດຢ່າງເດັດຂາດ ໃນຂົງເຂດເສດຖະກິດຂອງປະເທດ, ດັບສູນອຳນາດການປົກຄອງຂອງທຶນ ຂະໜາດໃຫຍ່ ແລະ ດຳເນີນການດັດສ້າງຮາກຖານ ດ້ານການເມືອງແລະເສດຖະກິດທີ່ຮັບປະກັນເງື່ອນໄຂ ອັນສະດວກທີ່ສຸດໃຫ້ແກ່ການຕໍ່ສູ້ເພື່ອສັງຄົມນິຍົມ- ໃນຂັ້ນຕໍ່ໄປ. ກຳລັງພື້ນຖານຂອງສຳພັນທະມິດດັ່ງກ່າວນີ້ ແມ່ນຊົນຊັ້ນ ກຳມະກອນ" ໑).

## ໓. ສັງຄົມນິຍົມ ແລະ ບັນດາຊົນຊັ້ນ

ເປັນຄັ້ງທຳອິດທີ່ລັດທິມາກໄດ້ພິສູດວ່າ ການແບ່ງສັງຄົມອອກເປັນ ຊົນຊັ້ນມີລັກສະນະຊົ່ວຄາວໃນທາງປະຫວັດສາດ, ໄດ້ພິສູດວ່າ ສັງຄົມໄດ້ແບ່ງ ອອກເປັນຊົນຊັ້ນພຽງແຕ່ຕາມລັກສະນະສະເພາະຂອງຍຸກສະໄໝແຫ່ງການ ຄອບຄອງຂອງກຳມະສິດສ່ວນຕົວເທົ່ານັ້ນ. ມາກ ແລະ ອັງແກນ ໄດ້ພິສູດ ວ່າການລົບລ້າງບັນດາຊົນຊັ້ນມີຄວາມຈຳເປັນທາງປະຫວັດສາດ, ໄດ້ກຳນົດເສັ້ນ

---

໑) ກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ພັກກຳມະກອນ. ເອກະສານ. ມົດສະກູ, ວັນທີ ໕-໑໗ ມິຖຸນາ ໑໙໖໙. ມົດສະກູ, ສຳນັກພິມ " ໂປລິດອິດສະດັດ", ໑໙໖໙, ໜ້າ ໓໑໐.

ທາງພົນຖານ ແລະ ເງື່ອນໄຂເພື່ອລົບລ້າງຊົນຊັ້ນ. ມີແຕ່ການສ້າງຕັ້ງກຳມະສິດລວມໝູ່ກ່ຽວກັບພາຫະນະການຜະລິດເທົ່ານັ້ນ ເປັນການສ້າງເງື່ອນໄຂ ທີ່ຈຳເປັນ ແລະ ສ້າງປະຖົມປັດໄຈສຳລັບການເຮັດໃຫ້ຊົນຊັ້ນດັບສູນໄປ. ມີແຕ່ການຕໍ່ສູ້ຊົນຊັ້ນຢ່າງບໍ່ປະນີປະນອມຂອງຊົນຊັ້ນກຳມາຊີບ ແລະ ການທີ່ ຊົນຊັ້ນກຳມາຊີບໄດ້ສ້າງຕັ້ງຜະເດັດການການເມືອງຂອງຕົນຂຶ້ນເທົ່ານັ້ນ ເປັນ ເສັ້ນທາງທີ່ຈະນຳໄປເຖິງສັງຄົມທີ່ບໍ່ມີຊົນຊັ້ນ.

ການລົບລ້າງຊົນຊັ້ນບໍ່ແມ່ນເຫດການທີ່ຈະເກີດຂຶ້ນ ໃນບາດໜຶ່ງຍາມດຽວໄດ້. ມັນແມ່ນທົ່ວທັງຍຸກສະໄໝປະຫວັດສາດໜຶ່ງ. ໄລຍະທີ່ໜຶ່ງ ແລະສຳຄັນໃນທິດທາງນີ້ ແມ່ນໄລຍະຂ້າມຜ່ານຈາກທຶນນິຍົມກ້າວຂຶ້ນສູ່ສັງຄົມນິຍົມ. ໄລຍະຂະຫຍາຍຕົວທາງປະຫວັດສາດດັ່ງກ່າວ ດຳເນີນໄປໃນທຸກໆປະເທດທີ່ພວມກໍ່ສ້າງສັງຄົມນິຍົມ.

ການປະຕິວັດສັງຄົມນິຍົມ ນຳໄປເຖິງການປ່ຽນແປງໂຄງປະກອບຊົນຊັ້ນ-ຂອງສັງຄົມໃນດ້ານຮາກຖານ, ປ່ຽນແປງການຊົງຊາກຳລັງລະຫວ່າງບັນດາ-ຊົນຊັ້ນ. ໃນໄລຍະຂ້າມຜ່ານຈາກທຶນນິຍົມ ກ້າວຂຶ້ນສູ່ສັງຄົມນິຍົມໃນທຸກໆ ປະເທດຢ່າງໜ້ອຍມີສາມພາກສ່ວນເສດຖະກິດຄືເສດຖະກິດສັງຄົມນິຍົມ, ເສດຖະກິດການຜະລິດສິນຄ້ານ້ອຍ ແລະ ເສດຖະກິດທຶນນິຍົມ. ບົດບາດນຳ ໜ້າໃນເສດຖະກິດແມ່ນຂອງພາກສ່ວນເສດຖະກິດສັງຄົມນິຍົມ. ໂດຍສອດຄ່ອງກັບສາມພາກສ່ວນເສດຖະກິດດັ່ງກ່າວ ໃນໄລຍະຂ້າມຜ່ານ ມີສາມຊົນຊັ້ນຄື: ຊົນຊັ້ນກຳມະກອນ, ຊາວຜະລິດນ້ອຍ (ຊາວນາເປັນຕົ້ນຕໍ) ແລະ ນາຍທຶນ.

ຫລັງຈາກການສ້າງຕັ້ງຜະເດັດການກຳມາຊີບແລ້ວ, ຖານະຂອງທຸກໆຊົນຊັ້ນໃນສັງຄົມໄດ້ມີການປ່ຽນແປງໃນທາດແທ້. ການປະຕິວັດສັງຄົມນິຍົມ ໄດ້ຟາດບາດຄ້ອນອັນແຮງກ້າໃສ່ຊົນຊັ້ນກົດຂີ່ຂູດຣີດ. ຫລັງຈາກການລົບລ້າງ ກຳມະສິດຕໍ່ທີ່ດິນຂອງພວກເຈົ້າທີ່ດິນແລ້ວ ຊົນຊັ້ນເຈົ້າທີ່ດິນກໍຖືກລົບລ້າງໄປ. ນາຍທຶນໄດ້ສູນເສຍການປົກຄອງດ້ານການເມືອງ ແລະ ຄວາມເຂັ້ມແຂງ ແຮງກ້າດ້ານເສດຖະກິດທີ່ເຄີຍມີມາໃນອະດີດ. ຫາກແຕ່ນາຍທຶນຍັງຮັກສາບາງຖານະໃນເສດຖະກິດ, ຄວາມດີເລີດດ້ານຄວາມຮູ້ ແລະ ຄວາມຊຳນິຊຳນານ ໃນການຄຸ້ມຄອງການຜະລິດຍັງຢູ່ນຳຝ່າຍນາຍທຶນ. ນາຍທຶນພະຍາຍາມ ຢາກເອື່ອຍອີງໃສ່ການຄ້ຳຊູຂອງຈັກກະພັດນິຍົມສາກົນ.

ຈາກຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງ ແລະ ໄຮ້ກຳມະສິດ ພາຍໃຕ້ລະບອບ ທຶນນິຍົມ ຊົນຊັ້ນກຳມະກອນໄດ້ກາຍເປັນຊົນຊັ້ນປົກຄອງດ້ານການເມືອງ, ທີ່ມີພາທະນະການຜະລິດທີ່ສຳຄັນທີ່ສຸດ, ແລະ ສະແດງຕົວເປັນຜູ້ຈັດຕັ້ງ ແລະນຳພາການກໍ່ສ້າງສັງຄົມນິຍົມ. ບົນພື້ນຖານແຫ່ງຜົນປະໂຫຍດດ້ານເສດຖະກິດ ແລະ ການເມືອງລວມກັນລະຫວ່າງຊົນຊັ້ນກຳມະກອນ ແລະ ຊາວນາຜູ້ອອກແຮງ - ງານ, ພັນທະພາບລະຫວ່າງຊົນຊັ້ນດັ່ງກ່າວ ໄດ້ຮັບການເສີມຂະຫຍາຍ ແລະ ເຂັ້ມແຂງແຮງກ້າຂຶ້ນ. ວ.ອິ.ເລນິນ ໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຮອບດ້ານບັນຫາກ່ຽວກັບພັນທະພາບລະຫວ່າງຊົນຊັ້ນກຳມະກອນ ແລະ ຊາວນາໃນໄລຍະຂ້າມຜ່ານ, ໂດຍເນັ້ນໜັກວ່າ ພັນທະພາບນີ້ແມ່ນຫລັກການສູງສຸດຂອງຜະເດັດການຂອງຊົນຊັ້ນກຳມາຊີບ.

ດັ່ງທີ່ບົດຮຽນຂອງສັງຄົມນິຍົມແຫ່ງໂລກໄດ້ຊີ້ໃຫ້ເຫັນວ່າ ແມ່ນນັກລັດທິ - ມາກນັ້ນເອງ ທີ່ເປັນຜູ້ສະໜັບສະໜູນທີ່ສະເໝີຕົ້ນສະເໝີປາຍ ໃນການແກ້ໄຂບັນຫາກະສິກຳ ເພື່ອຜົນປະໂຫຍດຂອງມະຫາຊົນຊາວນາຈຳນວນ ຫລວງຫລາຍ. ໃນບັນດາປະເທດສັງຄົມນິຍົມ ບໍ່ພຽງແຕ່ໄດ້ມີການແກ້ໄຂຢ່າງ ຖືກຕ້ອງບັນຫາກ່ຽວກັບການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊາວນາໃນໄລຍະການປະຕິວັດຕ້ານສັກດີນາ ແລະ ຕ້ານຈັກກະພັດນິຍົມ (ເຊັ່ນບັນຫາທີ່ດິນ, ລົບລ້າງເສດເຫລືອຂອງສັກດີນາ) ເທົ່ານັ້ນ, ແຕ່ຍັງໄດ້ບັນລຸ ຈຸດປະສົງສຸດທ້າຍແຫ່ງພັນທະພາບຊົນຊັ້ນກຳມະກອນ ແລະ ຊາວນາຄືຮັບປະກັນການດັດສ້າງກະສິກຳແບບສັງຄົມນິຍົມ. ທ່ານໄກສອນ ພົມວິຫານກ່າວວ່າ:"...ໃນເງື່ອນໄຂເສດຖະກິດຂອງປະເທດພວກເຮົາປະຈຸບັນ ສ່ວນທີ່ສຳຄັນໄປກວ່ານັ້ນແມ່ນຕ້ອງດຳເນີນການດັດສ້າງການຜະລິດນ້ອຍກະແຈກກະຈາຍເອກະເທດ ກໍ່ສ້າງ ເປັນເສດຖະກິດລວມໝູ່ສັງຄົມນິຍົມດ້ວຍວິທີຊຸກຍູ້ການຫັນເປັນ ສະຫະກອນ"໑). ທ່ານໄກສອນ ພົມວິຫານໄດ້ເວົ້າເຖິງຄວາມຈຳເປັນ ຕ້ອງຊ່ວຍເຫລືອຊາວນາດ້ວຍຫລາຍວິທີທາງໃນການຈັດຕັ້ງສະຫະກອນ ໃນການກະສິ ກຳ ແລະ ປ່າໄມ້, ໃນວຽກງານດັດສ້າງການຜະລິດ, ປັບປຸງຖານະດ້ານ ວັດຖຸ ແລະ ຍົກລະດັບວັດທະນະທຳຂອງຊາວນາໃຫ້ສູງຂຶ້ນເທື່ອລະກ້າວ, ເພີ່ມທະວີ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ. ໜ້າ ໓໐໗.

ພັນທະພາບກຳມະກອນ-ຊາວນາ. ພ້ອມກັນນັ້ນ ທ່ານໄກສອນ ພົມວິຫານ ໄດ້ຊີ້ແຈງເຖິງຄວາມຈຳເປັນຕ້ອງຊ່ວຍຊາວຫັດຖະກອນ, ພໍ່ຄ້າຊາວຂາຍ ນ້ອຍ ແລະ ຜູ້ຜະລິດນ້ອຍ ໃນການຈັດຕັ້ງສະຫະກອນ, ໃນການລົບລ້າງຢ່າງ ສົມເຫດຸກໆຮູບແບບການຈັດຕັ້ງທຸລະກິດທຶນນິຍົມ.

ຄວາມຂັດແຍ່ງທີ່ເປັນປໍລະປັກຕົ້ນຕໍໃນໄລຍະຂ້າມຜ່ານນັ້ນ ແມ່ນຄວາມຂັດແຍ່ງລະຫວ່າງຊົນຊັ້ນກຳມະກອນ, ມະຫາຊົນຊາວນາສ່ວນຫລວງຫລາຍ ເປັນຝ່າຍໜຶ່ງ ແລະ ນາຍທຶນເປັນອີກຝ່າຍໜຶ່ງ. ເນື່ອງຈາກວ່າຄວາມເປັນປໍລະປັກກັນທາງຊົນຊັ້ນຍັງຄົງມີຢູ່, ເນື່ອງຈາກວ່າການຕໍ່ສູ້ຊົນຊັ້ນຍັງສືບຕໍ່ໃນຊົ່ວໄລຍະຂ້າມຜ່ານຢູ່ ເລນິນ ໄດ້ຂຽນວ່າ: "ພະເດັດການກຳມາຊີບແມ່ນການ ຕໍ່ສູ້ຊົນຊັ້ນລະຫວ່າງຊົນຊັ້ນກຳມາຊີບທີ່ໄດ້ຮັບໄຊຊະນະ ແລະ ໄດ້ຍາດເອົາ ອຳນາດການປົກຄອງທາງດ້ານການເມືອງ ເຂົ້າໃນກຳມືຂອງຕົນ ເພື່ອຕ້ານພວກນາຍທຶນທີ່ປະລາໄຊລົງ, ແຕ່ບໍ່ທັນຖືກດັບສູນເທື່ອ, ບໍ່ທັນສູນຫາຍໄປເທື່ອແລະບໍ່ທັນຍຸດຕິການຕໍ່ຕ້ານ ແລະ ພວມເພີ່ມທະວີການຕໍ່ຕ້ານ" [1].

ການຕໍ່ສູ້ຊົນຊັ້ນໃນໄລຍະຂ້າມຜ່ານ ດຳເນີນໄປໃນເງື່ອນໄຂທີ່ມີລັກສະນະພິເສດ. ອັນສຳຄັນຢູ່ບ່ອນວ່າ ຊົນຊັ້ນກຳມະກອນດຳເນີນການຕໍ່ສູ້ໂດຍມີອາວຸດທີ່ເຂັ້ມແຂງຢູ່ໃນກຳມືຂອງຕົນ ຄືອຳນາດການປົກຄອງ. ຈາກນັ້ນຈຶ່ງມີ ລັກສະນະພິເສດຂອງບັນດາຮູບແບບການຕໍ່ສູ້ຊົນຊັ້ນໃນໄລຍະຂ້າມຜ່ານ. ອີງຕາມບົດຮຽນຂອງສາທາລະນະລັດໂຊວຽດ ທີ່ໜຸ່ມນ້ອຍ, ເລນິນໄດ້ໄຈ້ແຍກ ໕ ຮູບແບບດັ່ງກ່າວເຊັ່ນ: ໑) ການປາບປາມການຕ້ານທານຂອງພວກກົດຂີ່ຂູດຮີດ, ໒) ສົງຄາມກາງເມືອງໃນຖານະເປັນຮູບແບບທີ່ຮ້າຍແຮງສຸດຂີດຂອງການຕໍ່ສູ້ຊົນຊັ້ນລະຫວ່າງຊົນຊັ້ນກຳມາຊີບ ແລະ ນາຍທຶນ, ໓) ການຕໍ່ສູ້ເພື່ອການນຳພາຊາວນາ ແລະ ມະຫາຊົນໄຮ້ກຳມາຊີບອື່ນໆ, ໔) ການຕໍ່ສູ້ເພື່ອໝູນ ໃຊ້ນັກວິຊາການນາຍທຶນ, ໕) ການຕໍ່ສູ້ເພື່ອສ້າງຕັ້ງລະບຽບວິໄນແບບໃໝ່ ສັງຄົມນິຍົມໃນການອອກແຮງງານ. [2]

ການຕໍ່ສູ້ຊົນຊັ້ນໃນໄລຍະຂ້າມຜ່ານແຕ່ທຶນນິຍົມ ຂຶ້ນສູ່ສັງຄົມນິຍົມ ໃນປະ

---

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມທີ ໓໘, ໜ້າ ໓໗໗.

໒) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມທີ ໓໙, ໜ້າ ໒໙໑-໒໙໙.

ເທດຕ່າງໆອາດມີລັກສະນະພິເສດແບບນີ້ ຫລືແບບນັ້ນ ໂດຍຂຶ້ນກັບເງື່ອນ ໄຂ
ຕົວຈິງ. ເຫດການຕົວຈິງ ແຫ່ງການຄົງຢູ່ຂອງລະບົບສັງຄົມນິຍົມແຫ່ງໂລກ ,
ການປ່ຽນແປງທາງດ້ານການຊ່ວງຊາກກຳລັງຢ່າງມີຜົນດີ ໃຫ້ແກ່ລະບົບສັງຄົມນິ-
ຍົມ ໃນຂອບເຂດທົ່ວໂລກນັ້ນ ໄດ້ສ້າງເງື່ອນໄຂໃຫມ່ສຳລັບຊົນຊັ້ນກຳມະກອນ,
ພັກລັດທິມາກທີ່ເປັນພັກກຳອຳນາດໃນການປະຕິບັດແນວທາງການເມືອງຢ່າງມີ
ໄຫວພິບກວ່າເກົ່າ, ແລະ ໄດ້ຫລຸດຜ່ອນກຳລັງ ແລະ ຄວາມອາດສາມາດ -
ຕ້ານທານຄືນຂອງບັນດາຊົນຊັ້ນກົດຂີ່ຂູດຮີດໃນປະເທດນີ້ຫລືປະເທດນັ້ນ.

ຄືກັນກັບໄລຍະຂ້າມຜ່ານແຕ່ທຶນນິຍົມຂຶ້ນສູ່ສັງຄົມນິຍົມ ແມ່ນໄລຍະທີ່ ຫລີກ
ລ່ຽງບໍ່ໄດ້ນັ້ນ ການຕໍ່ສູ້ຊົນຊັ້ນກໍແມ່ນສິ່ງຫລີກລ່ຽງບໍ່ໄດ້ໃນປະຫວັດສາດໃນ ໄລ
ຍະນີ້ເຊັ່ນດຽວກັນ. ບັນດາຊົນຊັ້ນກົດຂີ່ຂູດຮີດທີ່ຖືກໂຄ່ນລົ້ມລົງໄປແລ້ວ, ອິດທິ
ກຳລັງ ແລະ ມູນເຊື້ອຂອງລະບອບເກົ່າ ເວລາໃດກໍພະຍາຍາມຕ້ານຢັນການ
ກໍ່ສ້າງສັງຄົມນິຍົມ. ລັດທີ່ໄດ້ກ້າວຂຶ້ນສູ່ເສັ້ນທາງແຫ່ງການກໍ່ສ້າງສັງຄົມນິຍົມ-
ຈຳຕ້ອງປາບປາມພຶດຕິກຳມ້າງເພທຳລາຍຂອງນາຍທຶນ, ຕໍ່ສູ້ກັບແນວຄິດຄອນ
ແຄນທາງການເມືອງ ພາຍໃນຊົນຊັ້ນນາຍທຶນນ້ອຍ ຢູ່ໃນຕົວເມືອງ ແລະ ຊົນ
ນະບົດ, ພາຍໃນບາງສ່ວນຂອງປັນຍາຊົນ ລະບອບເກົ່າ.

ການທີ່ມີເສດເຫລືອຂອງບັນດາຊົນຊັ້ນກົດຂີ່ຂູດຮີດໃນບາງປະເທດ ທີ່ພວມ
ເດີນຕາມເສັ້ນທາງແຫ່ງການກໍ່ສ້າງສັງຄົມນິຍົມແຕ່ບໍ່ທັນບັນລຸໄຊຊະນະ ສົມບູນ
ຂອງສັງຄົມນິຍົມເທື່ອນັ້ນ ແມ່ນເງື່ອນໄຂທີ່ອາດພາໃຫ້ການຕໍ່ສູ້ຊົນຊັ້ນໃນ ປະ
ເທດເຫລົ່ານີ້ຮ້າຍແຮງຂຶ້ນ ຍ້ອນຜົນສະທ້ອນຂອງບັນດາປັດໄຈພາຍນອກ ຫລື
ພາຍໃນ. ຈາກບ່ອນນີ້ ຈຶ່ງຈຳເປັນຕ້ອງມີສະຕິລະວັງຕົວປະຕິວັດ, ຈຳເປັນ
ຕ້ອງຮັດແໜ້ນລະບົບສັງຄົມນິຍົມແຫ່ງໂລກ ເຊິ່ງເປັນພື້ນຖານແຫ່ງຄວາມເຂັ້ມ
ແຂງແຮງກ້າຂອງກຳລັງສັງຄົມນິຍົມໃນແຕ່ລະປະເທດ ໃນລະບົບສັງຄົມ ນິຍົມ
ແຫ່ງໂລກ.

ອຳນາດການປົກຄອງຂອງປະຊາຊົນ ຢູ່ລາວບໍ່ແມ່ນຈະຖືກໃຈຫມົດທຸກຄົນ.
ສັດຕູຂອງປະເທດລາວໃຫມ່, ທັງພາຍນອກກໍ່ດີພາຍໃນໄດ້ພະຍາຍາມ ຫລາຍ
ຄັ້ງເພື່ອຢາກທຳລາຍຫມາກຜົນໄຊຊະນະຂອງລາວ. ພວກປະຕິການ ພາຍໃນ
ໄດ້ທຳລາຍມ້າງເພທາງດ້ານການເງິນ ແລະ ເສດຖະກິດ, ຈັດຕັ້ງຂົນຂວາຍ
ເອົາພະນັກງານທີ່ຊຳນິຊຳນານໃຫ້ໂຕນຫນີຈາກປະເທດ. ພວກປະຕິການຕ່າງ

ປະເທດ ແລະພວກຕ້ານການປະຕິວັດລາວ ທີ່ໄດ້ຮັບການສະໜັບສະໜູນຈາກບັນດາວົງການຈັກກະພັດນິຍົມ ແລະ ວົງການສອດແນມຕ່າງປະເທດນັ້ນ ດຳເນີນການ ທ້າທາຍເກາະຜີດຢູ່ຂອດຊາຍແດນຢ່າງເປັນລະບົບ.

ຫາກແຕ່ວ່າພັກປະຊາຊົນປະຕິວັດລາວ ບໍ່ພຽງແຕ່ສາມາດກຳແໜ້ນ ອຳນາດການປົກຄອງເທົ່ານັ້ນ, ແຕ່ຍັງສາມາດຮັກສາອຳນາດການປົກຄອງໄວ້,ບໍ່ປ່ອຍປະໃຫ້ກຳລັງຕ້ານການປະຕິວັດກໍ່ສົງຄາມກາງເມືອງຂຶ້ນ ແລະ ບໍ່ປ່ອຍປະໃຫ້ພວກປະຕິການດຳເນີນການແຊກແຊງດ້ວຍກຳລັງປະກອບອາວຸດ.ພັກປະຊາຊົນປະຕິວັດ ສາມາດເຮັດໄດ້ດັ່ງນັ້ນກໍ່ຍ້ອນວ່ານັບແຕ່ຫົວທີພູນມາ ໄດ້ປະຕິບັດນະໂຍບາຍສາມັກຄີພາຍໃນຊາດ, ກໍ່ສ້າງ ແລະ ເພີ່ມທະວີພັນທະພາບລະຫວ່າງຊົນຊັ້ນກຳມະກອນກັບຊາວນາ. ແນວທາງການເມືອງດັ່ງກ່າວ ແມ່ນແນວທາງທີ່ຖືກຕ້ອງ, ມີວິທະຍາສາດ, ເພາະໄດ້ວາງອອກ,ບົນພື້ນຖານແຫ່ງການໝູນ-ໃຊ້ຫລັກມູນ ລັດທິມາກ-ເລນິນຢ່າງມີຫົວຄິດປະດິດສ້າງ ແລະ ຕອບສະໜອງຜົນປະໂຫຍດອັນພື້ນຖານຂອງປະຊາຊົນລາວ. ທ່ານໄກສອນ ພົມວິຫານ ໄດ້ກ່າວວ່າ "ພັກເຮົາ, ເຖິງວ່າໄດ້ກຳເນີດຂຶ້ນໃນເງື່ອນໄຂຂອງປະເທດໜຶ່ງທີ່ດ້ອຍພັດທະນາ, ການພົ້ນແຍກຊົນຊັ້ນໃນສັງຄົມຍັງບໍ່ທັນເລິກເຊິ່ງເທື່ອແລະຊົນຊັ້ນກຳມະກອນຍັງອ່ອນນ້ອຍ, ແຕ່ກໍ່ສາມາດເປັນຜູ້ນຳພາແຕ່ຜູ້ດຽວຕໍ່ການປະຕິວັດຂອງປະເທດເຮົາຢ່າງໝັ້ນຄົງ ແລະ ໄດ້ພາການປະຕິວັດກ້າວໄປສູ່ໄຊຊະນະອັນສົມບູນໄດ້ຄືໃນສູ່ມື້ນີ້. ອັນນັ້ນແມ່ນຍ້ອນຫລາຍສາຍເຫດ, ແຕ່ສາຍເຫດພື້ນຖານອັນໜຶ່ງແມ່ນຍ້ອນພັກເຮົາ ສາມາດສ້າງກອມກຳລັງພັນທະພາບກຳມະກອນ-ຊາວນາ ອັນໜັກແໜ້ນຂຶ້ນໄດ້" ໑).

ຜົນສຳເລັດທີ່ຍິ່ງໃຫຍ່ທີ່ສຸດຂອງສັງຄົມ ສັງຄົມນິຍົມ ແລະ ຈຸດພິເສດ ທີ່ເປັນທາດແທ້ຂອງການປ່ຽນແປງດ້ານໂຄງປະກອບຂອງມັນນັ້ນ ແມ່ນການ ລົບລ້າງບັນດາຊົນຊັ້ນກົດຂີ່ຂູດຮີດ. ຢູ່ສະຫະພາບໂຊວຽດ ບັນດາຊົນຊັ້ນກົດຂີ່ຂູດ-ຮີດຖືກລົບລ້າງຢ່າງສິ້ນເຊີງ ພາຍຫລັງສາມສິບປີທີ່ມີການສ້າງຕັ້ງສະຫະພາບ-ໂຊວຽດ. ປະຈຸບັນນີ້ ບັນດາປະເທດສັງຄົມນິຍົມສ່ວນຫລວງຫລາຍໄດ້ລົບລ້າງ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ ໜ້າ ໖໖.

ບັນດາຊົນຊັ້ນກົດຂີ່ຂູດຮີດຢ່າງສິ້ນເຊີງ. ການລົບລ້າງບັນດາຊົນຊັ້ນກົດຂີ່ຂູດຮີດ ໝາຍເຖິງການກົດຂີ່ຂົ່ມເຫັງ ແລະ ຄວາມເປັນປໍລະປັກລະຫວ່າງຊົນຊັ້ນພາຍ ໃນປະເທດໄດ້ສູນຫາຍໄປ, ໝາຍຄວາມວ່າ ບໍ່ມີຕົ້ນເຫດພາຍໃນທີ່ຈະພາໃຫ້ ເກີດມີການຟື້ນຟູລັດທິທຶນນິຍົມ.

ຫາກແຕ່ການລົບລ້າງບັນດາຊົນຊັ້ນກົດຂີ່ຂູດຮີດ ແລະ ຄວາມເປັນປໍລະປັກ ກັນລະຫວ່າງຊົນຊັ້ນ ບໍ່ໝາຍເຖິງການລົບລ້າງບັນດາຊົນຊັ້ນເວົ້າລວມ. ແມ່ນ ແຕ່ໃນສັງຄົມສັງຄົມນິຍົມທີ່ຂະຫຍາຍຕົວ ທີ່ໄດ້ກໍ່ສ້າງສຳເລັດໃນສະຫະພາບໂຊ ວຽດນັ້ນກໍຍັງມີບັນດາຊົນຊັ້ນ ແລະ ຄວາມແຕກຕ່າງກັນລະຫວ່າງພວກເຂົາ - ເຈົ້າຄືລະຫວ່າງຊົນຊັ້ນກຳມະກອນ ແລະ ຊາວນາ, ລະຫວ່າງຜູ້ທີ່ອອກແຮງ- ງານດ້ວຍມັນສະໝອງ ແລະ ດ້ວຍຮ່າງກາຍ, ລະຫວ່າງພົນລະເມືອງໃນຕົວ ເມືອງ ແລະ ຊົນນະບົດ.

ກຳລັງນຳໜ້າຂອງສັງຄົມໃນການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິ- ຍົມແມ່ນຊົນຊັ້ນກຳມະກອນ. ຢູ່ ສ.ສ.ສ.ຊ. ຊົນຊັ້ນກຳມະກອນແມ່ນ ກຳລັງ ການຜະລິດຕົ້ນຕໍຂອງສັງຄົມ. ໃນຈຳນວນພົນລະເມືອງທີ່ເຮັດວຽກຢູ່ໃນ ປະ ເທດນັ້ນ ຊົນຊັ້ນກຳມະກອນມີອັດຕາສ່ວນຫລາຍກວ່າຊັ້ນຄົນອື່ນໆໃນສັງຄົມ.ຊົນ ຊັ້ນກຳມະກອນຢູ່ ສ.ສ.ສ.ຊ. ຜະລິດຫລາຍກວ່າ ໔/໕ ຂອງຜະລິດຕະພັນທີ່ ຜະລິດອອກທັງໝົດໃນທົ່ວປະເທດ. ກຳມະກອນອອກແຮງງານໃນໂຮງຈັກ - ໂຮງງານ, ໃນນິຄົມແຫ່ງລັດປະກອບເປັນກຳມະສິດຂອງທົ່ວປວງຊົນ, ແລະ ຂອງລັດ. ສ່ວນກຳມະສິດດັ່ງກ່າວນີ້ປະກອບເປັນພາກສ່ວນໃຫຍ່ ແລະແມ່ນຮູບ ແບບກຳມະສິດທີ່ເປັນເຈົ້າພາທາງຢູ່ ສ.ສ.ສ.ຊ.

ລັກສະນະພິເສດ ແລະ ສະເພາະ ທັງແມ່ນສະພາບການໃໝ່ດ້ານຄຸນນະ ພາບຂອງສັງຄົມສັງຄົມນິຍົມນັ້ນ ແມ່ນຄວາມເປັນເອກະພາບດ້ານການເມືອງ- ສັງຄົມ ແລະ ແນວຄິດ. ພື້ນຖານແຫ່ງຄວາມເປັນເອກະພາບດັ່ງກ່າວນີ້ ແມ່ນ ຜົນປະໂຫຍດອັນພື້ນຖານທີ່ສອດຄ່ອງກັນລະຫວ່າງຊົນຊັ້ນກຳມະກອນ, ຊາວນາ ສະຫະກອນກະເສດ ແລະ ປັນຍາຊົນຜູ້ອອກແຮງງານ. ທ່າອຽງຕົ້ນຕໍໃນການ ປ່ຽນແປງດ້ານໂຄງປະກອບສັງຄົມຂອງສັງຄົມ ສັງຄົມນິຍົມທີ່ຂະຫຍາຍຕົວ ຢູ່ ສ.ສ.ສ.ຊ. ນັ້ນແມ່ນຂະບວນວິວັດແຫ່ງການໃກ້ຊິດກັນລະຫວ່າງຊົນຊັ້ນ ແລະ ຊັ້ນຄົນໃນສັງຄົມ, ການລົບລ້າງຄວາມແຕກຕ່າງທີ່ເປັນທາດແທ້ລະຫວ່າງພວກ

ເຂົາເຈົ້າ.

ພື້ນຖານຂອງຂະບວນວິວັດດັ່ງກ່າວນີ້ແມ່ນການກໍ່ສ້າງພື້ນຖານວັດຖຸ- ເຕັກນິກຂອງລັດທິກອມມູນິດນິຍົມ, ການປັບປຸງທົ່ວທັງລະບົບການພົວພັນສັງຄົມໃຫ້ດີຂຶ້ນ, ການເປີດກວ້າງການປະຕິວັດວິທະຍາສາດ-ເຕັກນິກໃນທຸກດ້ານ. ເຊັ່ນຕົວຢ່າງ ການດັດສ້າງທາງດ້ານສັງຄົມທີ່ເລິກເຊິ່ງຢູ່ເຂດຊົນນະບົດ, ການປະກອບກົນຈັກຢ່າງຄົບຊຸດເຂົ້າໃນການຜະລິດກະສິກຳ ແລະ ມາດຕາການອື່ນໆທີ່ພັກກອມມູນິດ ແລະ ລັດໄດ້ດຳເນີນມານັ້ນໄດ້ນຳໄປເຖິງການປ່ຽນແປງທີ່ເປັນທາດແທ້ຂອງຊົນຊັ້ນຊາວນາສະຫະກອນກະເສດ. ພ້ອມກັນກັບການເພີ່ມທະວີກົນຈັກຢູ່ເຂດຊົນນະບົດແລ້ວ ຈຳນວນຂອງຊາວນາ-ນັກກົນຈັກເຊັ່ນ ນັກຂັບລົດໄຖ, ນັກຂັບລົດກ່ຽວເຂົ້າປະສົມ, ນັກຂັບລົດ ແລະ ອື່ນໆນັ້ນ ກໍ່ເພີ່ມຂຶ້ນເຊັ່ນດຽວກັນ. ລະດັບການສຶກສາ ແລະ ລະດັບວັດທະນະທຳຂອງຊາວນາ ໄດ້ຍົກສູງຂຶ້ນຢ່າງຫລວງຫລາຍ. ຕາມລັກສະນະ ແລະ ລະດັບຂອງຄ່າແຮງງານ - ແລ້ວຊາວນາສະຫະກອນກະເສດໃກ້ຊິດກັບຊາວກຳມະກອນຢ່າງຫລວງຫລາຍ.

ການໃກ້ຊິດກັນລະຫວ່າງຊົນຊັ້ນກຳມະກອນ, ຊາວນາ ແລະ ປັນຍາ ຊົນພວມດຳເນີນຢູ່ໃນ ສ.ສ.ສ.ຊ. ການອອກແຮງງານຂອງກຳມະກອນ ແລະ ຊາວນາໃນການຜະລິດນັ້ນນັບມື້ກາຍເປັນລັກສະນະການອອກແຮງງານດ້ວຍມັນສະຫມອງ. ກຳມະກອນ ແລະ ຊາວນານັບມື້ນັບປະກອບສ່ວນຢ່າງຕັ້ງຫນ້າ - ເຂົ້າໃນການເຄື່ອນໄຫວດ້ານສັງຄົມ-ການເມືອງ, ເຂົ້າໃນການ ປະດິດສ້າງແບບວິທະຍາສາດ. ອັນນີ້ນຳໄປເຖິງການລຶບລ້າງຄວາມແຕກຕ່າງທີ່ເປັນທາດແທ້ລະຫວ່າງການອອກແຮງງານດ້ວຍມັນສະຫມອງ ແລະ ດ້ວຍຮ່າງກາຍ.

ຂະບວນວິວັດແຫ່ງການລຶບລ້າງບັນດາຄວາມແຕກຕ່າງກັນດ້ານຊົນຊັ້ນນັ້ນບໍ່ແມ່ນດຳເນີນໄປແບບຕາມມີຕາມເກີດ. ພັກກອມມູນິດ ແລະ ລັດໂຊວຽດເປັນຜູ້ຈັດຕັ້ງ ແລະ ຊີ້ທາງໃຫ້ແກ່ຂະບວນວິວັດດັ່ງກ່າວ. ໃນກອງປະຊຸມໃຫຍ່ຄັ້ງທີ ໒໔ ພ.ກ.ສ.ຊ. ໄດ້ສະແດງແນວຄິດທີ່ວ່າ "ການສ້າງຕັ້ງໂຄງປະກອບສັງຄົມທີ່ປາສະຈາກຊົນຊັ້ນນັ້ນສ່ວນໃຫຍ່ຈະດຳເນີນໄປໃນຂອບເຂດຂອງສັງຄົມນິຍົມທີ່ສຸກງອມໃນປະຫວັດສາດ" ໑).

---

໑) ເອກະສານກອງປະຊຸມໃຫຍ່ຄັ້ງທີ໒໔ ພ.ກ.ສ.ຊ.ມົດສະກູ,໑໙໗໑,ຫນ້າ ໕໓.

ທິດສະດີມາກ ວ່າດ້ວຍບັນດາຊົນຊັ້ນ ແລະ ການພົວພັນລະຫວ່າງ ຊົນຊັ້ນ ມີຄວາມໝາຍດ້ານກຳມະວິທີວິທະຍາທີ່ສຳຄັນ. ຖ້າຫາກການແບ່ງຄົນ ອອກເປັນຊົນຊັ້ນນັ້ນ ແມ່ນຮູບແບບການແຍກຕົວດ້ານສັງຄົມທີ່ເລິກເຊິ່ງ ແລະ ໃຫຍ່ຫລວງທີ່ສຸດ, ຖ້າຫາກການຕໍ່ສູ້ຊົນຊັ້ນແມ່ນກົດເກນສຳຄັນທີ່ສຸດແຫ່ງການ ຂະຫຍາຍຕົວຂອງສັງຄົມແລ້ວ ແມ່ນວ່າການວິໄຈການພົວພັນເຊິ່ງກັນ ແລະກັນລະຫວ່າງບັນດາຊົນຊັ້ນ, ການວິໄຈຜົນປະໂຫຍດຂອງພວກເຂົາເຈົ້າ ແລະ ການຕໍ່ສູ້ຂອງພວກເຂົາເຈົ້ານັ້ນ ແມ່ນອໍກະແຈທີ່ຈະນຳໄປເຖິງຄວາມເຂົ້າໃຈທຸກ ໆ ປະກົດການ ແລະ ຂະບວນວິວັດໃນສັງຄົມ. ວ.ອິ.ເລນິນ ເຄີຍເວົ້າວ່າ:"ບໍ່ວ່າເວລາໃດ ຄົນກໍ່ເຄີຍຕົກເປັນເຫຍື່ອ ແລະ ຈະຕົກເປັນເຫຍື່ອຂອງ ຄວາມໂງ່ຈ້າ ຈາກການຫລອກລວງໂດຍຜູ້ອື່ນ ແລະ ການຫລອກລວງຕົນເອງ ໃນທາງການເມືອງ ຕາບໃດທີ່ຄົນບໍ່ຮູ້ຈັກໄຈ້ແຍກເບິ່ງສິ່ງທີ່ເຊື່ອງຊ້ອນຢູ່ເບື້ອງຫລັງຄຳເວົ້າ, ຄຳຖະແຫລງການ ແລະ ຄຳໝັ້ນສັນຍາກ່ຽວກັບຄຸນສົມບັດ, ສາສະໜາ, ການເມືອງ ແລະ ສັງຄົມແລ້ວຊອກເຫັນຜົນປະໂຫຍດຂອງຊົນຊັ້ນນີ້ຫລືຂອງຊົນຊັ້ນນັ້ນ" ໑) . ເພື່ອເຂົ້າໃຈຢ່າງເລິກເຊິ່ງ ແລະ ຕີລາຄາ ຢ່າງຖືກຕ້ອງປະກົດການສັງຄົມອັນນີ້ຫລືອັນນັ້ນ ໃນສັງຄົມທີ່ມີຊົນຊັ້ນ,ຕ້ອງວິໄຈເນື້ອໃນສັງຄົມຂອງມັນ ( ຫລືປະເພດສັງຄົມຂອງມັນ); ຜົນປະໂຫຍດຂອງບັນດາຊົນຊັ້ນທີ່ຢືນຢູ່ເບື້ອງຫລັງຂອງປະກົດການດັ່ງກ່າວ (ມັນນຳຜົນດີມາໃຫ້ໃຜ),ວິໄຈວ່າ ການຂະຫຍາຍຕົວຂອງປະກົດການດັ່ງກ່າວຈະນຳໄປເຖິງການ ປ່ຽນແປງແບບໃດໃນການຊັ່ງຊາກຳລັງລະຫວ່າງບັນດາຊົນຊັ້ນ.

ສຳລັບບັນດານັກລັດທິມາກແລ້ວ ທັດສະນະຊົນຊັ້ນກ່ຽວກັບທຸກໆເຫດ ການຕົວຈິງ ແລະ ປະກົດການໃນຊີວິດສັງຄົມນັ້ນ ແມ່ນທັດສະນະທີ່ອີງໃສ່ຫລັກໝັ້ນຂອງຊົນຊັ້ນກຳມະກອນ. ລັດທິມາກ-ເລນິນ ຮຽກຮ້ອງໃຫ້ນຳເອົາພຶດຕິກຳຕົວຈິງ ແລະ ການກະທຳ, ນຳເອົາການຕີລາຄາບັນດາເຫດການຕົວຈິງແລະປະກົດການບໍ່ວ່າເວລາໃດ ແລະ ຢູ່ແຫ່ງຫົນໃດກໍ່ຕາມໃຫ້ຢືນຢູ່ໃນທັດສະນະ ຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານທຸກຄົນຢ່າງຕື່ນຕົວ ແລະເດັດຂາດ, ຕ້ອງຕໍ່ສູ້ຢ່າງບໍ່ປະນີປະນອມຕ້ານທຸກໆການບິດເບືອນທິດສະດີຂອງຕົນ, ຕ້ອງ

---

໑) ວ.ອິ.ເລນິນ. ນິພົນຄົບຊຸດ, ເຫລັ້ມທີ ໒໓, ໜ້າ ໔໗.

ເຜີຍແຜ່ຢ່າງເດັດຂາດທາດແທ້ຂອງລະບົບແນວຄິດຂອງນາຍທຶນ.

ຕົວຢ່າງຂອງການວິໄຈຊົນຊັ້ນ ແມ່ນການວິໄຈປະກົດການສົງຄາມ ຕາມແບບມາກ-ເລນິນ. ລັດທິມາກຕີລາຄາສົງຄາມເປັນຄືການສືບຕໍ່ ການເມືອງຂອງຊົນຊັ້ນທີ່ແນ່ນອນ ດ້ວຍພາຫະນະຮຸນແຮງ. ຈາກນັ້ນ ເພື່ອເຂົ້າໃຈ ທາດແທ້ຂອງສົງຄາມຢ່າງຖືກຕ້ອງ, ເພື່ອກຳນົດການພົວພັນຂອງຕົນຕໍ່ສົງຄາມແລ້ວ ຕ້ອງໄຈ້ແຍກວ່າ ແມ່ນຊົນຊັ້ນໃດເປັນຜູ້ດຳເນີນສົງຄາມນີ້ ແລະ ດຳເນີນໄປເພື່ອຈຸດປະສົງອັນໃດ. ມັນອາດຈະແມ່ນສົງຄາມລະຫວ່າງຊົນຊັ້ນຜູ້ກຳອຳນາດໃນບັນດາປະເທດທຶນນິຍົມ ທີ່ບໍ່ສາມາດແບ່ງປັນຜົນກຳໄລລະຫວ່າງກັນໄດ້,ຫລືວ່າມັນແມ່ນສົງຄາມຂອງພວກໂຈນຈັກກະພັດນິຍົມ ທີ່ພະຍາຍາມຢາກບັງຄັບໃຫ້ປະຊາຊົນຊາດອື່ນໆເປັນຂ້າທາດຂອງຕົນ ຫລືມັນແມ່ນສົງຄາມ ເຊິ່ງໃນນັ້ນປະຊາຊົນ, ຊາວຜູ້ອອກແຮງງານເປັນຜູ້ດຳເນີນການຕໍ່ສູ້ປະຕິວັດ ເພື່ອອິດສະຫຼະພາບຂອງຕົນ. ປະຊາຊົນຫວຽດນາມ, ລາວ, ກຳປູເຈຍ ແລະ ຊາດອື່ນ ໆ ໄດ້ດຳເນີນການຕໍ່ສູ້ປະຕິວັດເພື່ອການປົດປ່ອຍຄືດັ່ງນີ້ເອງ. ລັດທິມາກຕ້ານສົງຄາມຍຶດຄອງຂອງພວກຈັກກະພັດນິຍົມຢ່າງເດັດຂາດ. ແຕ່ບັນດານັກລັດທິມາກ-ເລນິນ ທີ່ແທ້ຈິງຊົມເຊີຍຢ່າງອົບອຸ່ນສົງຄາມປົດປ່ອຍສົງຄາມປະຕິວັດ ແລະ ກຽມພ້ອມຊ່ວຍເຫລືອແບບສາກົນທີ່ແທ້ຈິງໃຫ້ແກ່ປະຊາຊົນທີ່ດຳເນີນສົງຄາມດັ່ງກ່າວ.

ບັນດານັກລັດທິມາກວິເຄາະເຫດການຄືປະຊາທິປະໄຕນັ້ນ ໃນທັດສະນະ-ຊົນຊັ້ນ. ບັນດານັກສັງຄົມສາດນາຍທຶນ ແລະ ພວກລັດທິແກ້ເວົ້າເຖິງ"ປະຊາທິປະໄຕອ້ອຍຕ້ອຍ", "ປະຊາທິປະໄຕເວົ້າລວມ". ຫາກແຕ່ໃນສັງຄົມທີ່ມີຊົນຊັ້ນ ບໍ່ມີແລະ ບໍ່ອາດຈະມີ "ປະຊາທິປະໄຕອ້ອຍຕ້ອຍ" ໂດຍປາສະຈາກເນື້ອໃນທາງຊົນຊັ້ນ. ໃນສັງຄົມທຶນນິຍົມມີປະຊາທິປະໄຕແບບນາຍທຶນ, ຫມາຍຄວາມວ່າປະຊາທິປະໄຕຂອງຄົນສ່ວນຫນ້ອຍ, ຂອງຄົນທີ່ມີຖານະພິເສດ.

ປະຊາທິປະໄຕກຳມາຊີບ, ສັງຄົມນິຍົມ ອັນນີ້ແມ່ນປະຊາທິປະໄຕສຳລັບຊາວຜູ້ອອກແຮງງານ, ຫມາຍຄວາມວ່າ ສຳລັບປະຊາຊົນສ່ວນຫລວງຫລາຍ, ແມ່ນປະຊາທິປະໄຕຢ່າງເຕັມສ່ວນທີ່ສຸດ.

ຫລັກການເລນິນ ກ່ຽວກັບທັດສະນະຊົນຊັ້ນຕໍ່ບັນຫາທິດສະດີ ແລະ ພຶດຕິ-ກຳຕົວຈິງໃນຊີວິດສັງຄົມນັ້ນ ໄດ້ຮັບການສ່ອງແສງ ແລະ ເສີມຂະຫຍາຍ ໃນ

ເອກະສານຂອງ ພ.ກ.ສ.ຊ. ແລະ ພັກກອມມູນິດ ແລະພັກກຳມະກອນອ້າຍນ້ອງອື່ນໆ. ໃນນັ້ນໄດ້ມີການວິໄຈແບບຊຶ້ນຊຸ້ນກ່ຽວກັບທາດແທ້ຂອງຍຸກສະໄໝປະຈຸບັນ, ໄດ້ໄຈ້ແຍກດ້ານຊຶ້ນຊຸ້ນ ແລະ ສັງຄົມຂອງການປະຕິວັດ ວິທະຍາສາດ-ເຕັກນິກໃນສະໄໝປະຈຸບັນ, ໄຈ້ແຍກບັນຫາທີ່ມີລັກສະນະທົ່ວໂລກຂອງຍຸກສະໄໝ. ຕາບໃດທີ່ຍັງມີບັນດາຊຶ້ນຊຸ້ນ ແລະ ການພົວພັນລະຫວ່າງຊຶ້ນຊຸ້ນຢູ່, ຕາບໃດທີ່ຍັງມີລັດທິຈັກກະພັດນິຍົມ ທີ່ປໍລະປັກກັບບັນດາປະເທດ ສັງຄົມນິຍົມຢູ່, ຕາບນັ້ນການວິໄຈແບບຊຶ້ນຊຸ້ນຍັງຈະແມ່ນສິ່ງທີ່ຈຳເປັນສຳລັບ ການຄົ້ນຄວ້າບັນດາປະກົດການ ແລະ ຂະບວນວິວັດໃນສັງຄົມ ສັງຄົມນິຍົມນັ້ນຢູ່.

# ພາກທີ ຫ້າ

## ການປະຕິວັດສັງຄົມ

ເມື່ອໃນພື້ນຖານ ຂອງຍຸກສະໄໝພວກເຮົານີ້ ແມ່ນການຂ້າມຜ່ານແຕ່ທຶນນິຍົມຂຶ້ນສູ່ສັງຄົມນິຍົມ. ດ້ວຍເຫດນັ້ນ ລັກສະນະພິເສດຂອງຍຸກສະໄໝນີ້ ຈຶ່ງແມ່ນການຂະຫຍາຍຕົວຢ່າງຟົດຟື້ນຂອງຂະບວນການປະຕິວັດໂລກ.

### ໑. ຄວາມຮູ້ກ່ຽວກັບການປະຕິວັດສັງຄົມ

ການປະຕິວັດສັງຄົມແມ່ນການປ່ຽນແປງໃນຮາກຖານໃນຊີວິດສັງຄົມ, ແມ່ນການກ້າວກະໂດດດ້ານຄຸນນະພາບໃນທຸກໆຂົງເຂດຂອງຊີວິດສັງຄົມ, ໃນເມື່ອມີການປ່ຽນແທນລະບອບສັງຄົມໜຶ່ງ ດ້ວຍລະບອບສັງຄົມອື່ນ, ທີ່ກ້າວໜ້າ - ກວ່າ, ວ.ອີ.ເລນິນ ໄດ້ຂຽນວ່າ ໃນຂະບວນວິວັດແຫ່ງການປະຕິວັດ ສັງຄົມ "ຄວາມຂັດແຍ່ງຈຳນວນຫລວງຫລາຍ ທີ່ໄດ້ທ້ອນໂຮມກັນເທື່ອລະໜ້ອຍໃນຊື່ວໄລຍະທີ່ເອີ້ນວ່າ ແມ່ນໄລຍະແຫ່ງການຂະຫຍາຍຕົວໂດຍສັນຕິນັ້ນ ລ້ວນແຕ່ໄດ້ຮັບການແກ້ໄຂ" ໑).

ການປະຕິວັດສັງຄົມປ່ຽນແປງດ້ານຄຸນນະພາບທົ່ວທັງລະບົບການພົວພັນສັງຄົມໃນທຸກໆຂົງເຂດແຫ່ງຊີວິດຂອງສັງຄົມເກົ່າ. ໃນດ້ານເສດຖະກິດ ການປະຕິວັດສັງຄົມແກ້ໄຂຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ທີ່ພວມ ຂະຫຍາຍຕົວກັບການພົວພັນແຫ່ງການຜະລິດທີ່ໄດ້ຫລ້າຫລັງ ແລະ ເກົ່າແກ່ ໄປແລ້ວ. ເກີດມີການປ່ຽນແທນລະບົບເສດຖະກິດແບບເກົ່າດ້ວຍແບບໃໝ່ທີ່ກ້າວໜ້າກວ່າ. ໃນດ້ານການເມືອງ ການປະຕິວັດສັງຄົມທັບມ້າງໂຄງປົນອັນເກົ່າ

ແລະ ກໍສ້າງອັນໃໝ່, ອີງໃສ່ໂຄງປົນອັນໃໝ່ດັ່ງກ່າວ ຮັບປະກັນໃຫ້ຮູບການຈັດຕັ້ງສັງຄົມ-ເສດຖະກິດແບບໃໝ່ໄດ້ຮັບການເສີມຂະຫຍາຍໃຫ້ໝັ້ນຄົງແລະແໜ້ນແກ່ນ. ໃນດ້ານແນວຄິດການປະຕິວັດສັງຄົມ ຈະນຳໄປເຖິງ ການສ້າງຕັ້ງ ແລະ ຮັດແໜ້ນລະບົບແນວຄິດໃໝ່, ເຊິ່ງແມ່ນແນວຄິດຂອງຊົນຊັ້ນ ທີ່ກ້າວໜ້າ ທີ່ໄດ້ດຳເນີນການປະຕິວັດໃຫ້ສຳເລັດ.

ການປະຕິວັດສັງຄົມແມ່ນກົດເກນຂະຫຍາຍຕົວຂອງສັງຄົມ ທີ່ມີຄວາມເປັນປໍລະປັກກັນລະຫວ່າງຊົນຊັ້ນ. ຄວາມຂັດແຍ່ງລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດໃນສັງຄົມ ທີ່ມີການກົດຂີ່ຂູດຮີດ ໄດ້ປະກົດຕົວອອກມາໃນຮູບແບບການປະທະກັນລະຫວ່າງບັນດາຊົນຊັ້ນ, ສະແດງຕົນອອກໃນຮູບການຕໍ່ສູ້ຊົນຊັ້ນຢ່າງດຸເດືອດ. ຊົນຊັ້ນປົກຄອງປົກປັກຮັກສາການ ພົວພັນແຫ່ງການຜະລິດທີ່ໄດ້ຫຼ້າຫຼັງໄປແລ້ວ ກໍເນື່ອງວ່າການພົວພັນແຫ່ງການ ຜະລິດດັ່ງກ່າວຄ້ຳປະກັນອຳນາດການປົກຄອງດ້ານເສດຖະກິດ ແລະ ການເມືອງທີ່ສົມບູນໃຫ້ແກ່ພວກເຂົາ. ເພື່ອຈຸດປະສົງນີ້ ຊົນຊັ້ນປົກຄອງນຳໃຊ້ຫຼາກຫຼາຍພາຫະນະ, ທຸກກຳລັງຂອງລັດ ແລະ ທົ່ວທັງລະບົບ ໂຄງປົນ ທີ່ມີໃນກຳມື. ສ່ວນອີກດ້ານໜຶ່ງ ຊົນຊັ້ນທີ່ກ້າວໜ້າພະຍາຍາມຢາກປ່ຽນແປງຖານະຖືກກົດຂີ່-ເຫັງຂອງຕົນ ໃນຮາກຖານດ້ວຍວິທີທາງລົບລ້າງການພົວພັນແຫ່ງການ ຜະລິດແບບເກົ່າ ແລະ ສ້າງຕັ້ງການພົວພັນການຜະລິດແບບໃໝ່ ທີ່ກ້າວໜ້າ ຂຶ້ນມາ.

ຖ້າຫາກອຳນາດການປົກຄອງລັດ ຍັງຢູ່ໃນກຳມືຂອງຊົນຊັ້ນປົກຄອງຢູ່ແມ່ນວ່າຈະລົບລ້າງການພົວພັນແຫ່ງການຜະລິດທີ່ຫຼ້າຫຼັງໄປແລ້ວນັ້ນບໍ່ໄດ້. ສະນັ້ນເພື່ອສ້າງຕັ້ງ ແລະ ປັບປຸງລະບອບໃໝ່ຈຶ່ງຈຳຕ້ອງໂຄ່ນລົ້ມອຳນາດ ການເມືອງຂອງຊົນຊັ້ນປົກຄອງ. ຖ້າຫາກບໍ່ຍຶດເອົາອຳນາດການດັ່ງກ່າວນີ້ ຊົນຊັ້ນທີ່ກ້າວໜ້າກໍບໍ່ສາມາດເຮັດໃຫ້ຜົນປະໂຫຍດຂອງຕົນປະກົດຕົວເປັນຈິງ ແລະບໍ່ສາມາດປົກປັກຮັກສາຖານະທີ່ຍາດເອົາມາໄດ້.

ດ້ວຍເຫດນັ້ນ ບັນຫາພື້ນຖານຂອງການປະຕິວັດຈຶ່ງແມ່ນບັນຫາກ່ຽວກັບອຳນາດການປົກຄອງລັດ. ວ.ອິ.ເລນິນເຄີຍໄດ້ເນັ້ນໜັກວ່າ: "ການທີ່ອຳນາດການປົກຄອງລັດ ໄດ້ຂ້າມຜ່ານຈາກກຳມືຂອງຊົນຊັ້ນໜຶ່ງໄປສູ່ກຳມືຂອງອີກຊົນຊັ້ນໜຶ່ງນັ້ນ ແມ່ນຈຸດພິເສດທີ່ໜຶ່ງທີ່ສຳຄັນ ແລະ ຕົ້ນຕໍຂອງການປະຕິວັດ ໃນ

ຄວາມໝາຍດ້ານວິທະຍາສາດທີ່ເຄັ່ງຄັດ, ກໍຄືໃນຄວາມໝາຍ ດ້ານການເມືອງຕົວຈິງຂອງຄວາມຮູ້ດັ່ງກ່າວ" 1).

ການປະຕິວັດສັງຄົມ ໄດ້ດຳເນີນໄປໃນຮູບຖານຈັດຕັ້ງສັງຄົມ-ເສດຖະກິດທີ່ມີຄວາມເປັນປົລະປັກທີ່ແຕກຕ່າງກັນ, ໃນເງື່ອນໄຂດ້ານເສດຖະກິດ ແລະການເມືອງ-ສັງຄົມ ທີ່ແຕກຕ່າງກັນ. ດ້ວຍເຫດນັ້ນການປະຕິວັດດັ່ງກ່າວ ຈຶ່ງແຕກຕ່າງກັນໃນດ້ານລັກສະນະ, ປະເພດແລະ ກຳລັງຂຸກດັນ.

ລັກສະນະ, ປະເພດຂອງການປະຕິວັດ, ເນື່ອໃນພື້ນຖານຂອງມັນກຳນົດດ້ວຍວິທີທີ່ການປະຕິວັດປະຕິບັດໜ້າທີ່ສັງຄົມອັນໃດ ແລະ ມີກຳລັງຂຸກດັນດ້ານສັງຄົມອັນໃດໃຫ້ເຂົ້າຮ່ວມໃນການປະຕິວັດ. ເຊັ່ນ ການປະຕິວັດນາຍທຶນ ໄດ້ແກ້ໄຂຄວາມຂັດແຍ່ງລະຫວ່າງວິທີການຜະລິດແບບນາຍທຶນ ທີ່ພວມຂະຫຍາຍຕົວ ຢູ່ກັບລະບອບສັງຄົມ ແບບສັກດີນາ.

ການປະຕິວັດນາຍທຶນອີກແບບໜຶ່ງນັ້ນ ແມ່ນການປະຕິວັດປະຊາທິປະໄຕ-ນາຍທຶນ, ເຊິ່ງໃນນັ້ນມະຫາຊົນຈຳນວນຫລວງຫລາຍ (ໃນໄລຍະຈັກກະພັດນິຍົມ ແມ່ນຊົນຊັ້ນກຳມາຊີບເປັນຕົ້ນຕໍ ) ໄດ້ສິ່ງຜົນສະທ້ອນອັນໃຫຍ່ຫລວງ ຕໍ່ບາດກ້າວຂອງການປະຕິວັດດັ່ງກ່າວ.

ຂະບວນການປົດປ່ອຍຊາດໃນຍຸກສະໄໝປະຈຸບັນນີ້ ໄດ້ບົ່ງຕົວຮູບແບບ ພິເສດຂອງການປະຕິວັດ ຄືການປະຕິວັດຊາດ-ປະຊາທິປະໄຕ, ເຊິ່ງໃນນັ້ນຊົນຊັ້ນກຳມາຊີບ (ຢູ່ບ່ອນທີ່ມີຊົນຊັ້ນກຳມາຊີບ ) ແລະ ຊາວນາພ້ອມກັນກັບນາຍທຶນແຫ່ງຊາດ. ຕ້ານກັບລັດທິລ່າເມືອງຂຶ້ນ. ໃນເງື່ອນໄຂທີ່ແນ່ນອນ ການປະຕິວັດນີ້ຈະກ້າວຂ້າມສູງກວ່າຂອບເຂດຂອງການດັດປ່ຽນແບບນາຍທຶນ ແລະສ້າງປະຖົມປັດໄຈໃຫ້ແກ່ເສັ້ນທາງຂະຫຍາຍຕົວທີ່ບໍ່ແມ່ນທຶນນິຍົມ ຫລືໃຫ້ແກ່ການປະຕິວັດສັງຄົມນິຍົມ. ການປະຕິວັດສັງຄົມນິຍົມ ແມ່ນປະເພດສູງທີ່ສຸດຂອງ ການປະຕິວັດສັງຄົມ.

ໃນການຕີລາຄາການຂະຫຍາຍຕົວຂອງການປະຕິວັດລາວ, ທ່ານ ໄກສອນ ພົມວິຫານ ໄດ້ໃຫ້ຂໍ້ສັງເກດວ່າ: ພ.ປ.ປ.ລ. " ໄດ້ຢືນຢັນຕັ້ງແຕ່ຫົວທີໂລດລັກສະນະຂອງການປະຕິວັດປົດປ່ອຍຊາດ ຢູ່ໃນປະເທດເຮົາ ຄືການປະ

---

1) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ 33, ໜ້າ 133.

ຕິວັດຊາດ-ປະຊາທິປະໄຕໂດຍແມ່ນພັກຂອງຊົນຊັ້ນ ກຳມະກອນ ເປັນຜູ້ນຳພາ ແມ່ນນອນຢູ່ໃນມາດຕະເກນຂອງການປະຕິວັດກຳມາຊີບ, ແລະວັດຖຸປະສົງ - ຂອງມັນບໍ່ແມ່ນຢຸດເຊົາຢູ່ແຕ່ໃນເອກະລາດແຫ່ງຊາດແລະ ປະຊາທິປະໄຕເທົ່ານັ້ນ, ຫາກຕ້ອງພາປະເທດຊາດກ້າວຂຶ້ນສັງຄົມນິຍົມ, ກອມມູນິດນິຍົມ, ພ້ອມກັນນັ້ນ ພັກເຮົາກໍ່ຢັ້ງຢືນວ່າ ການປະຕິວັດຊາດ-ປະຊາທິປະໄຕຢູ່ໃນ ປະເທດເຮົາເປັນພາກສ່ວນໜຶ່ງທີ່ສະໜິດແໜ້ນຂອງການປະຕິວັດໂລກ". ຈາກນັ້ນ ລວມຄວາມໄດ້ວ່າ ການປະຕິວັດຢູ່ລາວ ໃນເບື້ອງຕົ້ນເປັນຄືການປະຕິວັດ ປະຊາຊົນ, ການປະຕິວັດເພື່ອການປົດປ່ອຍ, ການປະຕິວັດປະຊາທິປະໄຕ- ປະຊາຊົນ ແລະ ກ້າວຂຶ້ນເປັນການປະຕິວັດສັງຄົມນິຍົມ. ການສ້າງຕັ້ງ ສ.ປ.ປ ລ. ເມື່ອວັນທີ ໒ ທັນວາ ປີ ໑໙໗໕ ເປັນຂີດໝາຍຂອງການສິ້ນສຸດລົງຢ່າງມີໄຊຊະນະຂອງການປະຕິວັດຊາດ-ປະຊາທິປະໄຕຂອງປະຊາຊົນ ແລະ ການເລີ່ມຕົ້ນການປະຕິວັດສັງຄົມນິຍົມຢູ່ໃນປະເທດລາວ.

ລັກສະນະຂອງການປ່ຽນແປງແບບປະຕິວັດ, ປະເພດຂອງການປະຕິວັດ- ຍັງໄດ້ກຳນົດທັງລັກສະນະຂອງກຳລັງຊຸກດັນການປະຕິວັດ. ກຳລັງຊຸກດັນການປະຕິວັດ ແມ່ນບັນດາຊົນຊັ້ນທີ່ດຳເນີນການປະຕິວັດໂດຍກົງ. ໜຶ່ງໃນຈຳນວນຊົນຊັ້ນດັ່ງກ່າວ ມີບົດບາດນຳໜ້າ. ມັນດູດດຶງເອົາບັນດາຊົນຊັ້ນ ແລະ ຊັ້ນຄົນອື່ນໆໃນສັງຄົມ ທີ່ເຂົ້າຮ່ວມໃນການປະຕິວັດໃຫ້ເດີນໄປຕາມຫລັງຂອງຕົນ. ຊົນຊັ້ນນີ້ ມີບົດບາດເປັນຜູ້ນຳພາການປະຕິວັດ. ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບກຳລັງຊຸກດັນການປະຕິວັດ ມີຄວາມໝາຍອັນໃຫຍ່ຫລວງໃນດ້ານພຶດຕິກຳ-ຕົວຈິງ. ມັນແມ່ນອໍກະແຈໃຫ້ແກ່ການກຳນົດບົດບາດນຳພາຂອງຊົນຊັ້ນນີ້ຫລືຊົນຊັ້ນນັ້ນ, ກຳນົດເພື່ອນສຳພັນທະມິດຂອງເຂົາເຈົ້າໃນການປະຕິວັດ.

ໃນເງື່ອນໄຂຂອງປະເທດລາວ ໜຶ່ງໃນຈຳນວນສອງກຳລັງພື້ນຖານຂອງການປະຕິວັດ ແມ່ນຊາວນາ. ຊາວນາປະກອບເປັນສ່ວນຫລວງຫລາຍຂອງພົນລະເມືອງ, ມີນ້ຳໃຈປະຕິວັດສູງ ແລະ ມີຄວາມສາມາດທີ່ບົ່ມຊ້ອນຢ່າງ ຫລວງຫລາຍ. ທຸກອົງການຈັດຕັ້ງປະຕິວັດ ແລະ ກຳລັງແຮງປະຕິວັດຢູ່ໃນລາວ ປະກອບດ້ວຍຊາວນາເປັນສ່ວນໃຫຍ່ ຫາກແຕ່ຊາວນາບໍ່ແມ່ນຕົວແທນໃຫ້ແກ່ ວິທີການຜະລິດທີ່ແນ່ນອນ. ດ້ວຍເຫດນີ້ ຊາວນາຈຶ່ງບໍ່ສາມາດມີແນວທາງ ການເມືອງເອກະລາດເພື່ອການປົດປ່ອຍຕົນເອງ. ຊາວນາຈະກາຍເປັນກອງ ກຳ

ລັງທີ່ເຂັ້ມແຂງແຮງກ້າຂອງການປະຕິວັດໄດ້ ກໍ່ພຽງແຕ່ສາມັກຄີກັບຊົນຊັ້ນ ກຳມະກອນເທົ່ານັ້ນ.

ທ່ານໄກສອນ ພົມວິຫານ ເນັ້ນໜັກວ່າ ເຖິງແມ່ນຊົນຊັ້ນກຳມະກອນ ຢູ່ລາວ ມີຈຳນວນບໍ່ຫລາຍກໍ່ຕາມ, ແຕ່ແມ່ນກະໂຕຊົນຊັ້ນນີ້ເອງ ເປັນກຳລັງຕົ້ນຕໍຂອງການປະຕິວັດ. ຊົນຊັ້ນກຳມະກອນ ແມ່ນຕົວແທນໃຫ້ແກ່ວິທີການ ຜະລິດແບບໃໝ່ສັງຄົມນິຍົມ, ເປັນພຽງຊົນຊັ້ນດຽວທີ່ສາມາດເຕົ້າໂຮມສາມັກຄີແລະນຳພາຊາວຜູ້ອອກແຮງງານທຸກຄົນເຂົ້າຮ່ວມໃນການຕໍ່ສູ້ເພື່ອໂຄ່ນລົ້ມທຶນນິຍົມ, ເພື່ອການປົດປ່ອຍຊາດ, ກໍ່ສ້າງສັງຄົມໃໝ່ສັງຄົມນິຍົມ, ນຳເອົາສັງຄົມແລະປະເທດຊາດ ກ້າວຂຶ້ນສູ່ເສັ້ນທາງແຫ່ງການຂະຫຍາຍຕົວກ້າວໜ້າ. ນັບແຕ່ເລີ່ມຕົ້ນການຕໍ່ສູ້ເປັນຕົ້ນມາ ມີການຮັບປະກັນບົດບາດຂອງຊົນຊັ້ນກຳມະກອນ-ແລະ ພັກຂອງເຂົາເຈົ້າໃນການນຳພາຊາວນາ.

ບໍ່ແມ່ນວ່າເວລາໃດຊົນຊັ້ນທີ່ກ້າວໜ້າກໍ່ສາມາດດຳເນີນການປະຕິວັດ ສັງຄົມ. ເພື່ອຈຸດປະສົງນີ້ ນອກຈາກພື້ນຖານດ້ານເສດຖະກິດແລ້ວ (ເຊັ່ນຄວາມຂັດແຍ່ງກັນລະຫວ່າງກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະ-ລິດ)ຍັງຮຽກຮ້ອງໃຫ້ມີສະພາວະການປະຕິວັດ ແລະ ປັດໄຈອັດຕະວິໄສ ທີ່ສຸກງອມ.

ສະພາວະການປະຕິວັດ ແມ່ນຜົນການສັງລວມບັນດາເງື່ອນໄຂພາວະວິໄສທີ່ຈຳເປັນເພື່ອດຳເນີນການປະຕິວັດ. ດັ່ງ ວ.ອີ.ເລນິນ ໄດ້ໃຫ້ຂໍ້ສັງເກດວ່າ ສະພາວະການປະຕິວັດມີຈຸດພິເສດສາມຈຸດ.

ຈຸດທີໜຶ່ງ, ແມ່ນ "ວິກິດການຢູ່ "ຂັ້ນເທິງ", ໝາຍຄວາມວ່າ ບັນດາຊົນຊັ້ນປົກຄອງບໍ່ສາມາດຮັກສາການປົກຄອງຂອງຕົນໄວ້ໃນສະພາບເດີມໄດ້.ວິກິດການທາງການເມືອງ ຂອງຊົນຊັ້ນປົກຄອງໄດ້ພາໃຫ້ເກີດມີການແຕກແຍກ ແລະນຳໄປສູ່ຄວາມບໍ່ພໍໃຈ ແລະ ຄວາມຄຽດແຄ້ນຂອງບັນດາຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງ. ໃນການເລີ່ມຕົ້ນເຮັດການປະຕິວັດ ຖ້າມີແຕ່ "ຂັ້ນລຸ່ມບໍ່ຢາກ ດຳເນີນຊີວິດແບບເກົ່າ" ນັ້ນບໍ່ທັນພຽງພໍເທື່ອ, ແຕ່ຍັງຕ້ອງການໃຫ້ "ຂັ້ນເທິງບໍ່ສາມາດດຳເນີນຊີວິດແບບເກົ່າອີກພ້ອມ".

ຈຸດທີສອງ, ຄວາມເດືອດຮ້ອນ ແລະ ຄວາມທຸກທໍລະມານຂອງບັນດາ ຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງຮ້າຍແຮງຂຶ້ນກວ່າປົກກະຕິ, ຄວາມເປັນປໍລະປັກກັນ ລະ

ຫວ່າງຊົນຊັ້ນປົກຄອງ ແລະ ມະຫາຊົນທີ່ຖືກກົດຂີ່ຂົ່ມເຫັງຮ້າຍແຮງຂຶ້ນຢ່າງຜິດປົກກະຕິ. ຄວາມຮ້າຍແຮງຂຶ້ນດັ່ງກ່າວນີ້ອາດຈະພົວພັນກັບຄວາມທຸກທໍລະມານ ແລະ ຄວາມເດືອດຮ້ອນທາງເສດຖະກິດຂອງຊົນຊັ້ນ ກຳມະກອນ ແລະຊັ້ນຄົນອື່ນໆໃນພົນລະເມືອງ. ມັນອາດເກີດຂຶ້ນມາຈາກສາຍເຫດທີ່ມະຫາຊົນ ຊາວຜູ້ອອກແຮງງານບໍ່ມີສິດສະເຫມີພາບທາງສັງຄົມ ແລະ ປະສົບເຄາະຮ້າຍ. ໃນເງື່ອນໄຂປະຈຸບັນນີ້ຄວາມຮ້າຍແຮງດັ່ງກ່າວອາດເກີດຂຶ້ນມາຍ້ອນການຕໍ່ສູ້ຂອງມະຫາຊົນ ຕ້ານອຳນາດຮອບດ້ານ ແລະ ການກະທຳຕາມລຳພັງໃຈຂອງ ທຶນຜູກຂາດ, ຍ້ອນການຕໍ່ສູ້ເພື່ອປະຊາທິປະໄຕ, ຕ້ານແອກປົກຄອງຕ່າງປະເທດເພື່ອການປົດປ່ອຍຊາດ, ຍ້ອນການຕໍ່ສູ້ເພື່ອສັນຕິພາບ.

ຈຸດທີ່ສາມ, ຄວາມຫ້າວຫັນດ້ານການເມືອງຂອງມະຫາຊົນ ໄດ້ເຊີດຊູຂຶ້ນຢ່າງຫລວງຫລາຍ. ໃນໄລຍະນີ້ ບັນດາຊົນຊັ້ນປະຕິວັດໄດ້ຕື່ນຂຶ້ນຈາກສະພາບຍໍທໍ້ ແລະ ສະພາບຢຸດຊະງັກຢູ່ບ່ອນເກົ່າ ເຊິ່ງເປັນລັກສະນະພິເສດຂອງ ໄລຍະແຫ່ງການຂະຫຍາຍຕົວ "ແບບງຽບສະຫງັດ". ໃນໄລຍະນີ້ຈິດໃຈຕໍ່ສູ້ ຂອງມະຫາຊົນເພີ່ມທະວີຂຶ້ນຢ່າງແຂງແຮງ, ມະຫາຊົນມີຈິດໃຈບຸກຢ່າງຕັ້ງຫນ້າໃນບັນຫາການເມືອງ, ແລະ ໃນການລຸກຮືຂຶ້ນແບບປະຫວັດສາດຢ່າງເອກະລາດ.

ແຕ່ເພື່ອດຳເນີນການປະຕິວັດ ນອກຈາກເງື່ອນໄຂພາວະວິໄສທີ່ສະແດງ-ເຖິງລັກສະນະພິເສດຂອງສະພາວະການປະຕິວັດແລ້ວ, ຍັງຕ້ອງການໃຫ້ມີປັດໄຈອັດຕະວິໄສອີກ. ປັດໄຈອັດຕະວິໄສຂອງການປະຕິວັດສັງຄົມ ແມ່ນ ຊົນຊັ້ນປະຕິວັດກຽມພ້ອມຈະປ່ຽນແປງລະບອບສັງຄົມ, ແມ່ນຄວາມຕື່ນຕົວປະຕິວັດ - ຂອງຊົນຊັ້ນ, ຄວາມຫນັກແຫນ້ນ ແລະ ຄວາມຕັດສິນໃຈທີ່ເດັດຂາດເພື່ອການບັນລຸຈຸດປະສົງທີ່ໄດ້ຕັ້ງຂຶ້ນ, ອັນນີ້ແມ່ນການນຳພາມະຫາຊົນຂອງພັກ ທີ່ມີບົດຮຽນຢ່າງພຽງພໍ ແລະ ໄດ້ຜ່ານການຫລໍ່ຫລອມໃນການສູ້ຮົບ, ສາມາດ ວາງຍຸດທະສາດ ແລະ ຍຸດໂທບາຍຂອງການຕໍ່ສູ້ຢ່າງຖືກຕ້ອງ ແລະ ປະຕິບັດ ຍຸດທະສາດ ແລະ ຍຸດໂທບາຍດັ່ງກ່າວນັ້ນໃຫ້ປະກົດຜົນເປັນຈິງ.

ຄົນເປັນຜູ້ເຮັດການປະຕິວັດ ແລະ ຜົນສຳເລັດຂອງມັນຂຶ້ນກັບລະດັບການຈັດຕັ້ງ ແລະ ຄວາມສາມັກຄີຂອງຄົນ, ຂຶ້ນກັບຫົວຄິດປະດິດສ້າງ ແລະພະລັງງານຂອງພວກເຂົາເຈົ້າ, ຂຶ້ນກັບນ້ຳໃຈເສຍສະຫລະ ແລະ ຄວາມ ສາມາດໃນການຕໍ່ສູ້ຂອງພວກເຂົາເຈົ້າ. ປັດໄຈອັດຕະວິໄສກວມລວມເອົາ ຄວາມສາ

ມາດຂອງຊົນຊັ້ນປະຕິວັດ ໃນພຶດຕິກຳປະຕິວັດຢ່າງຕັ້ງໜ້າ ແລະ ເຂັ້ມແຂງ-ແຮງກ້າທີ່ຈະນຳໄປເຖິງການລົບລ້າງອຳນາດຂອງບັນດາຊົນຊັ້ນ ທີ່ໄດ້ພົ້ນ ສະໄໝໄປແລ້ວ. ອຳນາດນີ້ຈະບໍ່ລົ້ມລົງເອງຈັກເທື່ອ ຖ້າຫາກບໍ່ມີໃຜເປັນຜູ້ໂຄ່ນລົ້ມ" ມັນລົງ [1]. ການປະຕິວັດສັງຄົມຮຽກຮ້ອງໃຫ້ມີຄວາມເປັນເອກະພາບ-ກັນລະຫວ່າງເງື່ອນໄຂພາວະວິໄສ ແລະ ອັດຕະວິໄສ. ໂດຍໄດ້ແຍກສາຍພົວພັນເຊິ່ງກັນ ແລະ ກັນລະຫວ່າງເງື່ອນໄຂພາວະວິໄສ ແລະ ປັດໄຈອັດຕະວິ-ໄສ ວ.ອິ.ເລນິນ ໄດ້ຊີ້ແຈງວ່າ ເງື່ອນໄຂພາວະວິໄສມີບົດບາດຕັດສິນຊີ້ຂາດ. ໃນເວລາດຽວກັນນັ້ນ ທ່ານໄດ້ໃຫ້ຂໍ້ສັງເກດເຖິງບົດບາດອັນຕັ້ງໜ້າຂອງ ປັດໄຈອັດຕະວິໄສ ໃນເມື່ອຫາກມີເງື່ອນໄຂພາວະວິໄສທີ່ສຸກງອມແລ້ວ ໃນສະຖານະການປະຫວັດສາດຕົວຈິງ. ປັດໄຈອັດຕະວິໄສເຖິງຈະຍັງຄົງເປັນປັດໄຈສຳຮອງທີ່ຂຶ້ນກັບເງື່ອນໄຂພາວະວິໄສຢູ່ກໍ່ຕາມ ແຕ່ກໍ່ສາມາດມີຄວາມໝາຍຕັດສິນຊີ້ຂາດ. ໂດຍຂຶ້ນກັບລະດັບສຸກງອມ ແລະ ຄວາມຕັ້ງໜ້າຂອງມັນແລ້ວມັນຕັດສິນຄວາມອາດສາມາດຂອງສະພາວະການປະຕິວັດວ່າຈະໄດ້ຮັບການ ໝູນໃຊ້ຫລືບໍ່, ການປະຕິວັດຈະສຳເລັດຫລືບໍ່.

ນະໂຍບາຍການເມືອງຂອງພັກປະຊາຊົນປະຕິວັດລາວ ໄດ້ຊີ້ແຈງຢ່າງຈະແຈ້ງເຖິງຄວາມໝາຍຂອງປັດໄຈອັດຕະວິໄສໃນການປະຕິວັດ. ແນວທາງ - ລວມຂອງພັກໃນການປະຕິວັດຊາດ-ປະຊາທິປະໄຕ ແມ່ນ "ຍົກສູງຄັນທຸງແຫ່ງການປະຕິວັດຊາດ-ປະຊາທິປະໄຕ ພາຍໃຕ້ການນຳພາຂອງພັກຊົນຊັ້ນ ກຳມະກອນ ແລະ ແນໃສ່ເພື່ອກ້າວຂຶ້ນສັງຄົມນິຍົມ ". ໂດຍສອດຄ່ອງກັບແນວທາງດັ່ງກ່າວ ພັກໄດ້ກຳນົດຍຸດທະວິທີ, ຍຸດໂທບາຍ, ຮູບການຕົວຈິງ ແລະ ວິທີການຂອງການຕໍ່ສູ້ປະຕິວັດ. ທ່ານໄກສອນ ພົມວິຫານ ໄດ້ຂຽນວ່າ: "ປະຕິ-ບັດແນວທາງລວມດັ່ງກ່າວນັ້ນ ແມ່ນຍົກສູງຄັນທຸງຊາດ-ປະຊາທິປະໄຕພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນ ແລະ ກອງລະວັງໜ້າຂອງມັນຄື ພັກການເມືອງ ມາກ-ເລນິນ; ຈັດຕັ້ງແນວໂຮມເອກະພາບແຫ່ງຊາດອັນກວ້າງຂວາງບົນພື້ນຖານພັນທະພາບກຳມະກອນ-ຊາວນາ ພາຍໃຕ້ການນຳພາຂອງພັກ; ກໍ່ສ້າງອຳນາດການປົກຄອງກຳມະກອນຊາວນາ ແລະ ກອງທັບກຳມະກອນຊາວ

---

໑) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໔໖, ໜ້າ ໔໑໗.

ມາ ໂດຍແມ່ນພັກເປັນຜູ້ນຳພາ; ຫມູນໃຊ້ຍຸດໂທບາຍຢ່າງມີໄຫວພິບ, ໃຊ້ຫຼາກວິທີ, ຫຼາກຮູບການຕໍ່ສູ້ບົນຫລັກການເອົາຄວາມຮຸນແຮງປະຕິວັດຂອງມະຫາ ຊົນເປັນພື້ນຖານ ເພື່ອແກ້ໄຂຫຼາກໜ້າທີ່ຂອງການປະຕິວັດຢ່າງເຖິງຖອງ; ຕໍ່ສູ້ໂຈມຕີເພື່ອໂຄ່ນລົ້ມຈັກກະພັດອາເມລິກາຜູ້ຮຸກຮານ, ພວກສັກດີນາ ແລະ ນາຍທຶນຈຳໜ່າຍ; ພ້ອມກັນນັ້ນ, ຕ້ອງກໍ່ສ້າງປະຖົມປັດໄຈທາງດ້ານການເມືອງ,ເສດຖະກິດ, ວັດທະນະທຳ, ແນວຄິດຂອງລັດທິສັງຄົມນິຍົມຂຶ້ນໃນຂະບວນ ວິວັດແຫ່ງການດຳເນີນການປະຕິວັດຊາດ-ປະຊາທິປະໄຕນັ້ນໂລດ; ເສີມຂະຫຍາຍລັດທິຮັກຊາດ ແລະ ກຳລັງແຮງຂອງຊາດຢ່າງສູດຂີດ, ສົມທົບກັບລັດທິສາກົນກຳມາຊີບ ແລະ ກຳລັງແຮງຂອງຍຸກສະໄຫມຢ່າງແຫນ້ນແຟ້ນ ແລະອື່ນ"[໑].

## ໔. ທິດສະດີ ເລນິນ ກ່ຽວກັບການປະຕິວັດສັງຄົມນິຍົມ

ການປະຕິວັດສັງຄົມນິຍົມ ແມ່ນຂະບວນວິວັດທີ່ເລິກເຊິ່ງ ແລະຮອບດ້ານທີ່ສຸດຂອງການດັດສ້າງສັງຄົມຢ່າງເຖິງກົກເຖິງຮາກ.

ທາດແທ້ ແລະ ຈຸດພິເສດຂອງການປະຕິວັດສັງຄົມນິຍົມ ມີຫຍັງແດ່ ?

ຂໍ້ທີຫນຶ່ງ, ໂດຍແຕກຕ່າງກັບການປະຕິວັດສັງຄົມໃນສະໄຫມກ່ອນນັ້ນ ການປະຕິວັດສັງຄົມນິຍົມລົບລ້າງຫຼາກການກົດຂີ່ຂູດຮີດຢ່າງຕະຫລອດການ ໂດຍລົບລ້າງກຳມະສິດເອກະເທດຕໍ່ພາຫະນະການຜະລິດ, ການປະຕິວັດສັງຄົມນິຍົມປັດເຂ່ຍຄວາມອາດສາມາດຂອງການກົດຂີ່ຂູດຮີດ ແລະ ອື່ນໆທັງໃນຫຼາກຮູບການ

ຂໍ້ທີສອງ, ການປະຕິວັດສັງຄົມນິຍົມ ແມ່ນການປະຕິວັດຂອງມະຫາຊົນຈຳນວນຫລວງຫລາຍ, ແມ່ນການປະຕິວັດຂອງປະຊາຊົນຢ່າງແທ້ຈິງ. ກຳລັງຊຸກດັນຂອງການປະຕິວັດນີ້ ແມ່ນຊົນຊັ້ນກຳມະກອນທີ່ມີພັນທະພາບກັບຊາວນາແລະຊັ້ນຄົນໄຮ້ກຳມາຊີບອື່ນໆໃນພົນລະເມືອງ.

ຂໍ້ທີສາມ, ການປະຕິວັດສັງຄົມນິຍົມສ້າງຕັ້ງອຳນາດການປົກຄອງຂອງຊົນຊັ້ນທີ່ກ້າວຫນ້າ ແລະ ປະຕິວັດທີ່ສຸດຄືຊົນຊັ້ນກຳມະກອນ. ຫາກແຕ່ການປະຕິ-

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ... ຂອງການປະຕິວັດລາວ. ຫນ້າ ໗໖-໗໗.

ວັດບໍ່ສິ້ນສຸດພຽງແຕ່ການຍຶດອຳນາດເທົ່ານັ້ນ. ໂດຍອີງໃສ່ອຳນາດ ການປົກ
ຄອງທາງການເມືອງ ຊົນຊັ້ນກຳມະກອນປະຕິບັດການນຳພາຂອງຊາວຜູ້ອອກ-
ແຮງງານທຸກຄົນ ໃນການຕໍ່ສູ້ເພື່ອກໍ່ສ້າງສັງຄົມໃຫມ່ສັງຄົມນິຍົມ.

ຂໍ້ທີສີ່, ການປະຕິວັດສັງຄົມນິຍົມດູດດຶງເອົາມະຫາຊົນຈຳນວນຫລວງຫຼາຍ
ທີ່ສຸດເຂົ້າຮ່ວມໃນຂະບວນວິວັດແຫ່ງການກໍ່ສ້າງຮູບແບບໃຫມ່ຂອງຊີວິດສັງຄົມ.
ດ້ວຍເຫດນີ້ ການປະຕິວັດສັງຄົມນິຍົມຈຶ່ງເລິກເຊິ່ງ ແລະ ເຂັ້ມແຂງແຮງ ກ້າ
ຢ່າງບໍ່ມີຂອບເຂດກວ່າການປະຕິວັດອື່ນໆ.

ບົດຮຽນ ຂອງມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ ຢູ່ລັດເຊຍໄດ້ເປີດ
ເຜີຍໃຫ້ເຫັນຈຸດພິເສດຂອງການປະຕິວັດສັງຄົມນິຍົມຄືປະເພດສູງທີ່ສຸດ ຂອງ
ການປະຕິວັດສັງຄົມນັ້ນໄດ້ຢ່າງເຕັມສ່ວນ.

ການປະຕິວັດເດືອນຕຸລາ ໄດ້ໄຂເສັ້ນທາງໄປສູ່ການແກ້ໄຂບັນຫາທີ່ໄດ້ຕັ້ງ
ຂຶ້ນມາຕໍ່ຫນ້າທົ່ວທັງມວນມະນຸດ ທ່າມກາງການຂະຫຍາຍຕົວດ້ານສັງຄົມ, ໄຂ
ເສັ້ນທາງໄປສູ່ການກໍ່ສ້າງສັງຄົມຊະນິດໃຫມ່ຢ່າງແທ້ຈິງ.

ການປະຕິວັດເດືອນຕຸລາໄດ້ຊີ້ໃຫ້ເຫັນວ່າ ອຳນາດການປົກຄອງຂອງພວກ
ກົດຂີ່ຂູດຮີດ ບໍ່ແມ່ນອຳນາດທີ່ຄົງຢູ່ຕະຫລອດການ, ວ່າມັນອາດຈະປ່ຽນ ແທນ
ແລະ ຕ້ອງຖືກປ່ຽນແທນດ້ວຍອຳນາດການປົກຄອງຂອງຊາວຜູ້ອອກແຮງງານ.

ບົດຮຽນຂອງການປະຕິວັດເດືອນຕຸລາ ໄດ້ພິສູດຢ່າງຫນັກແຫນ້ນ ໃຫ້ເຫັນ
ວ່າ ຖ້າຫາກບໍ່ມີອຳນາດການປົກຄອງຂອງຊາວຜູ້ອອກແຮງງານ, ຖ້າຫາກບໍ່ມີ
ຄວາມເປັນລັດສັງຄົມນິຍົມ, ແລະ ນອກຈາກນີ້ແລ້ວແມ່ນບໍ່ເຄີຍມີແລະບໍ່ມີເສັ້ນ
ທາງອື່ນ ທີ່ຈະນຳໄປເຖິງສັງຄົມນິຍົມ.

ເປັນຄັ້ງທຳອິດທີ່ການປະຕິວັດສັງຄົມນິຍົມເດືອນຕຸລາໄດ້ເຮັດໃຫ້ມີ ຄວາມ
ອາດສາມາດລົບລ້າງການກົດຂີ່ຂູດຮີດ ແລະ ຫລຸດພົ້ນອອກຈາກອະນາທິປະໄຕ
ດ້ານເສດຖະກິດ, ຄວາມອາດສາມາດໃນການລົບລ້າງກຳມະສິດເອກະເທດຕໍ່
ພາຫະນະການຜະລິດ ແລະ ການປ່ຽນແທນມັນດ້ວຍກຳມະສິດຂອງສັງຄົມ.

ການປະຕິວັດເດືອນຕຸລາໄດ້ໄຂຊ່ອງທາງໃຫ້ແກ່ມະຫາຊົນຊາວຜູ້ອອກແຮງ
ງານຈຳນວນຫລວງຫລາຍເຂົ້າເຖິງການສຶກສາ ແລະ ວັດທະນະທຳ, ວິທະຍາ
ສາດ ແລະ ສິລະປະກຳ, ໄດ້ປົດປ່ອຍຫມູ່ມະຫາຊົນທາງດ້ານຈິດໃຈ.

ເປັນຄັ້ງທຳອິດທີ່ການປະຕິວັດສັງຄົມນິຍົມເດືອນຕຸລາ ໄດ້ແກ້ໄຂຫນຶ່ງໃນຈຳ

ມວນບັນຫາທີ່ສັບສົນ ແລະ ຫຍຸ້ງຍາກ ທີ່ສຸດໃນປະຫວັດສາດຂອງມວນມະນຸດຄື ບັນຫາຊົນຊາດ ແລະ ໄດ້ສ້າງຕັ້ງສິດສະເໝີພາບ, ຄວາມເປັນອ້າຍນ້ອງກັນ ມິດຕະພາບ ແລະ ຄວາມນັບຖືເຊິ່ງກັນແລະກັນ ລະຫວ່າງບັນດາປະຊາຊົນ - ແລະ ປະຊາຊາດ.

ການປະຕິວັດເດືອນຕຸລາ ໄດ້ຢັ້ງຢືນຫລັກການສະເໝີພາບດ້ານ ສັງຄົມ ແລະ ຄວາມເປັນທຳອັນແທ້ຈິງ. ໃນເງື່ອນໄຂສັງຄົມນິຍົມ ແຕ່ລະຄົນມີສິດ ທິ ແລະ ອິດສະຫລະພາບຢ່າງເຕັມສ່ວນ ຊຶ່ງອຳນວຍໃຫ້ພວກເຂົາເຈົ້າ ໄດ້ປະ ກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນຊີວິດເສດຖະກິດ, ການເມືອງ ແລະ ວັດທະ ນະທຳ. ໃນສັງຄົມສັງຄົມນິຍົມ ແຕ່ລະຄົນມີຄວາມສາມາດຄັດເລືອກເສັ້ນທາງ ແຫ່ງຊີວິດທີ່ສອດຄ່ອງກັບຄວາມປາຖະໜາ ແລະ ຄວາມສາມາດຂອງຕົນເປັນ ຜູ້ທີ່ມີຄຸນປະໂຫຍດສຳລັບປະເທດຊາດ ແລະ ປະຊາຊົນຂອງຕົນ. ສັງຄົມເປັນ ຜູ້ປົກປ້ອງບັນດາສິດທິ ແລະ ຜົນປະໂຫຍດຂອງຄົນ, ປົກປັກຮັກສາກຽດ ສັກສີ ພົນລະເມືອງ ແລະ ສັກສີຂອງຄົນ. ຖານະຂອງຄົນໃນສັງຄົມສັງຄົມນິຍົມ , ກ່ອນອື່ນໝົດແມ່ນກຳນົດດ້ວຍການອອກແຮງງານດ້ວຍຄວາມບໍລິສຸດໃຈ ແລະມີ ຜົນໃຫ້ແກ່ສັງຄົມ, ນ້ຳໃຈເປັນພົນລະເມືອງທີ່ສູງສົ່ງ, ແນວຄິດ ແລະ ຄຸນສົມ ບັດທີ່ປອດໃສ.

ການປະຕິວັດເດືອນຕຸລາໄດ້ຊີ້ເສັ້ນທາງ, ຮູບແບບ ແລະ ວິທີການ ດັດ ສ້າງໂລກແບບປະຕິວັດ ຊຶ່ງເປັນລັກສະນະສາກົນແລ້ວນັ້ນໃຫ້ແກ່ປະຊາຊົນທຸກໆ ຊາດ. ຜົນສະທ້ອນທາງສາກົນອັນຕົ້ນຕໍຂອງການປະຕິວັດເດືອນຕຸລາ,ທີ່ໄດ້ກຳ ນົດໂສມໜ້າ ຂອງຍຸກສະໄໝປະຈຸບັນນີ້ ແມ່ນການກຳເນີດ ແລະ ຂະຫຍາຍ ຕົວຂອງລະບົບສັງຄົມນິຍົມແຫ່ງໂລກ.

ກ.ມາກ ແລະ ຟ.ອັງແກນ ໄດ້ສ້າງພື້ນຖານທາງທິດສະດີໃຫ້ແກ່ ການ ຫລີກເວັ້ນບໍ່ໄດ້ຂອງການທີ່ລັດທິທຶນນິຍົມຕ້ອງຖືກດັບສູນ ແລະ ໄຊຊະນະ ຂອງ ລັດທິສັງຄົມນິຍົມ. ວ.อิ.ເລນິນ ໄດ້ສືບຕໍ່ ແລະ ເສີມຂະຫຍາຍທິດສະ ດີ ກ່ຽວກັບການປະຕິວັດສັງຄົມນິຍົມໃນສະຖານະການປະຫວັດສາດໃໝ່, ໃນ ເງື່ອນໄຂລັດທິຈັກກະພັດນິຍົມ.

ບັນດາຫລັກມູນພື້ນຖານແຫ່ງທິດສະດີເລນິນ ກ່ຽວກັບການປະຕິວັດ ສັງຄົມ ນິຍົມມີດັ່ງຕໍ່ໄປນີ້:

ເລນິນໄດ້ພິສູດວ່າ ການປະຕິວັດສັງຄົມນິຍົມສາມາດມີໄຊຊະນະໃນເບື້ອງຕົ້ນໃນບາງປະເທດຫລືໃນປະເທດດຽວ. ການວິໄຈການຂະຫຍາຍຕົວດ້ານເສດຖະກິດ ແລະ ການເມືອງຂອງບັນດາປະເທດທຶນນິຍົມໃນຍຸກສະໄຫມຈັກກະພັດນິຍົມນັ້ນ ໄດ້ຊີ້ໃຫ້ເຫັນວ່າ ມັນມີລັກສະນະຂ້ຽວຂາດ, ບໍ່ສະຫມໍ່າສະເຫມີ , ກ້າວກະໂດດ ແລະ ປະທະກັນ. ແລະ ຖ້າຫາກວ່າລະບົບທຶນນິຍົມເວົ້າ ລວມໄດ້ສຸກງອມສໍາລັບການປະຕິວັດກໍາມາຊີບ, ແຕ່ວ່າຈັງວະຄວາມໄວ ຂອງການເພີ່ມທະວີຄວາມຂັດແຍ່ງ ທີ່ເຮັດໃຫ້ການປະຕິວັດເປັນເລື່ອງທີ່ຫລີກລ່ຽງ ບໍ່ໄດ້ນັ້ນຊໍ້າພັດແຕກຕ່າງກັນໃນປະເທດຕ່າງໆ. ອັນນີ້ຫມາຍຄວາມວ່າ ການປະຕິ-ວັດອາດຈະເກີດຂຶ້ນກ່ອນອື່ນຫມົດຢູ່ບ່ອນທີ່ ຄວາມຂັດແຍ່ງຂອງຈັກກະພັດ ນິຍົມໄດ້ເຖິງຂີດຮ້າຍແຮງທີ່ສຸດ, ຢູ່ບ່ອນທີ່ຈັກກະພັດນິຍົມອ່ອນເພຍຈຸດໂຊມກວ່າຫມູ່.

ເລນິນ ໄດ້ໄຈ້ແຍກຢ່າງຮອບດ້ານ ບົດບາດຂອງຊົນຊັ້ນກໍາມະກອນໃນຖານະເປັນກໍາລັງຕົ້ນຕໍຂອງການປະຕິວັດ, ໄດ້ພິສູດຄວາມຈໍາເປັນຂອງ ພະເດັດການຂອງຊົນຊັ້ນກໍາມະກອນ. ທ່ານໄດ້ພິສູດວ່າ ມີແຕ່ພາຍໃຕ້ການນໍາຂອງຊົນຊັ້ນກໍາມະກອນ ແລະ ກອງລະວັງຫນ້າຂອງຊົນຊັ້ນນັ້ນຄືພັກມາກ-ເລນິນ ເທົ່ານັ້ນ, ມະຫາຊົນຊາວຜູ້ອອກແຮງງານຈຶ່ງສາມາດທັບມ້າງລະບອບທຶນນິຍົມແລະກໍ່ສ້າງສັງຄົມໃຫມ່ສັງຄົມນິຍົມ.

ເລນິນ ໄດ້ອ້າງອີງພື້ນຖານຄວາມຈໍາເປັນຕ້ອງມີພັນທະພາບຊົນຊັ້ນກໍາມະກອນ-ຊາວນາ ແລະ ຊັ້ນຄົນໄຮ້ກໍາມາຊີບອື່ນໆໃນຫມູ່ມະຫາຊົນຊາວຜູ້ອອກ - ແຮງງານນັ້ນວ່າ ເປັນຄືເງື່ອນໄຂສໍາຄັນ ແລະ ຈໍາເປັນທີ່ສຸດ ສໍາລັບ ໄຊຊະນະຂອງການປະຕິວັດສັງຄົມນິຍົມ.

ເລນິນ ໄດ້ພິສູດໃຫ້ເຫັນຂໍ້ສະຫລຸບທີ່ວ່າ ການປະຕິວັດປະຊາທິປະໄຕນາຍທຶນ ສາມາດກ້າວຂຶ້ນສູ່ການປະຕິວັດສັງຄົມນິຍົມ. ທ່ານໄດ້ຊີ້ແຈງວ່າຜູ້ນໍາແລະກໍາລັງຕົ້ນຕໍ ແລະ ສໍາຄັນຂອງການປະຕິວັດປະຊາທິປະໄຕນາຍທຶນ ໃນເງື່ອນໄຂຈັກກະພັດນິຍົມນັ້ນ ອາດແມ່ນ ແລະ ຕ້ອງແມ່ນພຽງແຕ່ຊົນຊັ້ນກໍາມາຊີບຊຶ່ງເປັນຊົນຊັ້ນທີ່ມີຄວາມສົນໃຈໂດຍກົງໃນການນໍາເອົາການປະຕິວັດໄປເຖິງ ຂັ້ນ

---

໑) ລ.ອີ.ເບຼສເນບ. ການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່ ແລະ ຄວາມກ້າວຫນ້າຂອງມວນມະນຸດ. ຫນ້າ ໕,໖, ໑໗.

ສຸດທ້າຍ. ໃນຂະນະດຽວກັນກັບການດັດສ້າງປະຊາທິປະໄຕຈົນຈຸ້ນກຳມະກອນ ທີ່ມີພັນທະພາບກັບຊາວນາກໍ່ກະກຽມເງື່ອນໄຂເພື່ອຂ້າມຜ່ານໄປສູ່ການປະຕິວັດສັງຄົມນິຍົມ ແລະ ດຳເນີນການຂ້າມຜ່ານດັ່ງກ່າວ.

ທ່ານໄກສອນ ພົມວິຫານ ຂຽນວ່າ: "ອຳນາດການປົກຄອງປະຕິວັດຂອງກຳມະກອນ-ຊາວນາ, ເຊິ່ງແມ່ນຈົນຈຸ້ນກຳມະກອນເປັນຜູ້ນຳພານັ້ນບໍ່ອາດຈະເນີ່ນາມົວ, ເພິ່ງພໍໃຈຢຸດຢູ່ທີ່ໄຊຊະນະທີ່ຍາດເອົາເອກະລາດ, ປະຊາທິປະໄຕມາໄດ້, ຫາກແມ່ນຕ້ອງຫັນເຂົ້າສູ່ໜ້າທີ່ປະຫວັດສາດຂອງຜະເດັດການກຳມາຈົນທັນທີ, ດຳເນີນການປະຕິວັດສັງຄົມນິຍົມ ແລະ ກໍ່ສ້າງສັງຄົມນິຍົມຕາມກົດເກນຂອງມັນ ແນໃສ່ແກ້ໄຂບັນຫາ "ໃຜເອົາຊະນະໃຜ" ລະຫວ່າງສອງເສັ້ນທາງສັງຄົມນິຍົມກັບທຶນນິຍົມຢ່າງເຖິງຖອງ, ນຳເອົາສັງຄົມແລະຊາດກ້າວຂຶ້ນຕາມທິດຂະຫຍາຍຕົວພາວະວິໄສຂອງຍຸກສະໄໝ". ໑)

ເລນິນ ໄດ້ໄຈ້ແຍກຢ່າງລະອຽດບັນຫາກ່ຽວກັບຮູບແບບການຂ້າມ ຜ່ານແບບປະຕິວັດຈາກທຶນນິຍົມຂຶ້ນສູ່ສັງຄົມນິຍົມ, ກ່ຽວກັບວິທີສັນຕິ ແລະບໍ່ສັນຕິໃນການດຳເນີນການປະຕິວັດສັງຄົມນິຍົມ, ກ່ຽວກັບບັນດາວິທີການຂອງຈົນຈຸ້ນກຳມະກອນ ແລະ ເພື່ອນສຳ ພັນທະມິດໃນການຍຶດອຳນາດ. ການຕໍ່ສູ້ເພື່ອ ຍຶດອຳນາດສາມາດດຳເນີນໄປໃນສອງຮູບແບບຄື ວິທີສັນຕິແລະບໍ່ສັນຕິ. ບົດຮຽນໄດ້ຊີ້ແຈງໃຫ້ເຫັນວ່າ ບັນດາຈົນຈຸ້ນກົດຂີ່ຂູດຮີດທີ່ເປັນຈົນຈຸ້ນປົກຄອງນັ້ນເວລາໃດກໍ່ຕໍ່ສູ້ເພື່ອຮັກສາອະພິສິດ ແລະ ຖານະເປັນເຈົ້າປົກຄອງຂອງຕົນ. ເວລາໃດພວກເຂົາເຈົ້າກໍ່ພະຍາຍາມຕ້ານຢັນບັນດາຈົນຈຸ້ນປະຕິວັດດ້ວຍກຳລັງ ປະກອບອາວຸດຢ່າງຕັ້ງໜ້າ. ອັນນີ້ໄດ້ພາໃຫ້ເກີດມີການຕໍ່ສູ້ດ້ວຍກຳລັງ ອາວຸດຂອງຊາວຜູ້ອອກແຮງງານ ເພື່ອຕອບໂຕ້ຄືນ. ໃນເງື່ອນໄຂດັ່ງກ່າວ ການປະຕິວັດບໍ່ແມ່ນແບບສັນຕິ. ການດຳເນີນການປະຕິວັດດັ່ງກ່າວພົວພັນກັບການລຸກຮືຂຶ້ນດ້ວຍກຳລັງອາວຸດ, ພົວພັນກັບສົງຄາມກາງເມືອງ.

ມະຫາຈົນຊາວຜູ້ອອກແຮງງານ ເວລາໃດກໍ່ມີຄວາມສົນໃຈເຮັດແນວ ໃດເພື່ອຍຶດອຳນາດໂດຍຫລີກເວັ້ນການຕໍ່ສູ້ດ້ວຍກຳລັງອາວຸດແລະຫລີກເວັ້ນ ສົງ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ . ໜ້າ ໔໘໖.

ຕາມກາງເມືອງ, ໝາຍຄວາມວ່າ ດຳເນີນການປະຕິວັດດ້ວຍສັນຕິວິທີ. ໃນກໍລະນີນີ້ການປ່ຽນແປງພື້ນຖານສັງຄົມຈະດຳເນີນໄປພ້ອມພົນຂອງການທີ່ມະຫາຊົນສ່ວນຫລວງຫລາຍໄດ້ຈັດຕັ້ງການບີບບັງຄັບແບບສັນຕິມາຈາກຂັ້ນລຸ່ມ.

ເລນິນ ໄດ້ເນັ້ນໜັກວ່າ ໃນທັງສອງກໍລະນີຄືວິທີສັນຕິ ແລະ ບໍ່ສັນຕິຂອງການປະຕິວັດແມ່ນເວົ້າເຖິງການຕໍ່ສູ້ເພື່ອຍຶດອຳນາດ. ສອງຮູບແບບພື້ນຖານ-ຂອງການປະຕິວັດມີການພົວພັນເຊິ່ງກັນ ແລະ ກັນຢ່າງແໜ້ນແຟ້ນ. ໃນການປະຕິວັດແບບສັນຕິມີໄລຍະແຫ່ງການຕໍ່ສູ້ແບບບໍ່ສັນຕິ ແລະກົງກັນຂ້າມ ໃນການປະຕິວັດແບບບໍ່ສັນຕິອາດຈະມີໄລຍະແຫ່ງການຕໍ່ສູ້ແບບສັນຕິ. ທຸກຢ່າງຂຶ້ນ ກັບເງື່ອນໄຂປະຫວັດສາດຕົວຈິງ. ວ.ອິ.ເລນິນ ໄດ້ສັ່ງສອນວ່າ ດ້ວຍເຫດ ນັ້ນຈຶ່ງບໍ່ຄວນຖືສຳຄັນບົດບາດເດັດຖານຂອງຮູບແບບໃດໜຶ່ງຂອງການປະຕິວັດ.ບໍ່ເຫັນຄວາມແຕກຕ່າງກັນດ້ານຄຸນນະພາບລະຫວ່າງຮູບແບບດັ່ງກ່າວນີ້ແມ່ນບໍ່ໄດ້. ວ.ອິ.ເລນິນ ໄດ້ຊີ້ແຈງວ່າ ບັນດາພັກກອມມູນິດ ແລະ ພັກກຳມະກອນ, ຊົນຊັ້ນກຳມະກອນທີ່ປະຕິວັດ ແລະ ເພື່ອນສຳພັນທະມິດຕ້ອງກຳແໜ້ນທຸກໆ ຮູບແບບຂອງການຕໍ່ສູ້ເພື່ອຍຶດອຳນາດ ແລະ ກຽມພ້ອມເພື່ອການປ່ຽນແທນ ຮູບແບບຂອງການຕໍ່ສູ້ແບບໜຶ່ງດ້ວຍອີກແບບໜຶ່ງຢ່າງໄວວາ ແລະ ກະທັນຫັນ ທີ່ສຸດ. ຄວາມເໝາະສົມໃນການໝູນໃຊ້ຮູບແບບນີ້ຫລືຮູບແບບນັ້ນຂອງການຕໍ່ສູ້ປະຕິວັດນັ້ນ ກຳນົດດ້ວຍການຄິດໄລ່ເບິ່ງກຳລັງຂອງບັນດາຊົນຊັ້ນຢ່າງເຄັ່ງຄັດ, ການພົວພັນເຊິ່ງກັນ ແລະ ກັນລະຫວ່າງຊົນຊັ້ນ ແລະ ຊົນຊາດ, ການສັງ - ລວມທຸກໆເງື່ອນໄຂທີ່ພາໃຫ້ເກີດມີວິກິດການແບບປະຕິວັດຂຶ້ນໃນປະເທດທີ່ກ່ຽວຂ້ອງ.

ໃນເມື່ອໄຈ້ແຍກຈຸດພິເສດຂອງການຕໍ່ສູ້ປະຕິວັດໃນລາວແລ້ວ ທ່ານ ໄກສອນ ພົມວິຫານ ໄດ້ຂຽນວ່າ: "ຂະບວນວິວັດແຫ່ງການເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງຂອງການປະຕິວັດປະເທດເຮົາໃນ ໓໐ ປີທີ່ຜ່ານມານັ້ນ ແມ່ນຂະບວນວິວັດແຫ່ງການຕໍ່ສູ້ດ້ວຍກຳລັງຮຸນແຮງປະຕິວັດຂອງມະຫາຊົນ ເຊິ່ງໄດ້ສະແດງອອກ ແລະ ໄດ້ຮັບການປະຕິບັດພາຍໃຕ້ຫລາຍຮູບການທີ່ແຕກຕ່າງກັນ , ຕ້ອງໄດ້ໝູນໃຊ້ບາດກ້າວເດີນອັນເໝາະສົມ, ມີຮູບການ, ວິທີການຕໍ່ສູ້ຢ່າງມີໄຫວພິບ, ອຸດົມຮັ່ງມີ, ແຕ່ແນວຄິດຊີ້ນຳອັນສະເໝີຕົ້ນສະເໝີປາຍຂອງພັກເຮົາເວລາໃດກໍ່ແມ່ນ "ດຳເນີນການປະຕິວັດດ້ວຍກຳລັງຮຸນແຮງ, ດ້ວຍ ຍຸດ

ທະສາດບູກ . ອັນນັ້ນ ແມ່ນເສັ້ນທາງແຫ່ງຄວາມສຳເລັດຜົນ ຂອງການປະຕິວັດຂອງປະເທດເຮົາ ໃນໄລຍະທີ່ຜ່ານມາ ແລະ ມັນກໍແມ່ນເສັ້ນທາງ ທີ່ຈະຕ້ອງມີໄຊຢ່າງເດັດຂາດໃນໄລຍະຕໍ່ໄປ"໑).

ເລນິນ ໄດ້ຊີ້ແຈງວ່າ ການປະຕິວັດສັງຄົມນິຍົມ ບໍ່ແມ່ນເຫດການ ຕົວຈິງພຽງອັນດຽວ, ຫາກແມ່ນຂະບວນວິວັດທີ່ສັບສົນ ແລະ ຍາວນານ ແຫ່ງການ-ດັດສ້າງຮາກຖານ ໃນທຸກງດ້ານຂອງຊີວິດສັງຄົມ. ການປະຕິວັດສັງຄົມນິຍົມບໍ່ສິ້ນສຸດລົງດ້ວຍການທີ່ອຳນາດການປົກຄອງໄດ້ປ່ຽນຈາກກຳມືຂອງນາຍທຶນ ຕົກເຂົ້າສູ່ກຳມືຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານທຸກຄົນ, ຫາກແຕ່ແມ່ນເລີ່ມຈາກເຫດການຕົວຈິງນີ້ເປັນຕົ້ນໄປເທົ່ານັ້ນ. ການປະຕິວັດຈະດຳເນີນຕໍ່ໄປຕາບໃດທີ່ເສດເຫລືອຂອງສັງຄົມທຶນນິຍົມຍັງບໍ່ຖືກລົບສູນ ແລະສັງຄົມນິຍົມຍັງບໍ່ໄດ້ຮັບໄຊຊະນະເທື່ອ. ດັ່ງນີ້ ຄວາມໝາຍສຳຄັນຂອງການປະຕິວັດສັງຄົມນິຍົມຈຶ່ງແມ່ນການກໍ່ສ້າງສັງຄົມໃຫມ່ ໃນດ້ານຄຸນນະພາບ, ຫາກບໍ່ແມ່ນພຽງແຕ່ ການທັບມ້າງສັງຄົມເກົ່າເທົ່ານັ້ນ. ທິດສະດີເລນິນ ກ່ຽວກັບການປະຕິວັດສັງຄົມນິຍົມນີ້ແມ່ນອົກະແຈເພື່ອເຂົ້າໃຈຢ່າງຖືກຕ້ອງຕໍ່ບັນດາບັນຫາ ທີ່ສັບສົນຂອງຂະບວນວິວັດດັ່ງກ່າວ, ແມ່ນພື້ນຖານແຫ່ງຍຸດທະສາດ ແລະ ຍຸດໂທບາຍຂອງຂະບວນການກອມມູນິດສາກົນ.

## ສ. ຂະບວນການປະຕິວັດໂລກ ແລະ ການປະຕິວັດ ຊາດ-ປະຊາທິປະໄຕ

ການທ້ອນໂຮມບັນດາກຳລັງພື້ນຖານຂອງການປະຕິວັດໃນຍຸກສະໄຫມເຊັ່ນລະບົບສັງຄົມນິຍົມແຫ່ງໂລກ, ຂະບວນການກຳມະກອນ ແລະ ກອມມູນິດ ໃນບັນດາປະເທດທຶນນິຍົມ ແລະ ຂະບວນການປົດປ່ອຍຊາດຂອງປະຊາຊົນ ຜູ້ຖືກກົດຂີ່ຂົ່ມເຫັງເຂົ້າເປັນກະແສອັນຫນຶ່ງອັນດຽວນັ້ນ ຕັດສິນລັກສະນະແລະ ເນື້ອໃນພື້ນຖານຂອງຂະບວນການປະຕິວັດໂລກ. ການປັບປຸງ ແລະ ເປີດກວ້າງ-

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ... ຂອງການປະຕິວັດລາວ. ໜ້າ ໒໒໐.

ລະບົບສັງຄົມນິຍົມແຫ່ງໂລກ ໄດ້ນຳໄປເຖິງການປ່ຽນແປງການຊັ່ງຊາ ກຳລັງໃນຂັ້ນພື້ນຖານຢ່າງເປັນຜົນດີໃຫ້ແກ່ສັງຄົມນິຍົມ, ໄດ້ສົ່ງຜົນກະທົບຢ່າງ ແຮງກ້າຕໍ່ບາດກ້າວທັງໝົດຂອງການຕໍ່ສູ້ຕ້ານຈັກກະພັດນິຍົມ; ການຕໍ່ສູ້ຊົນຊັ້ນຂອງຊົນຊັ້ນກຳມະກອນ, ມະຫາຊົນຊາວຜູ້ອອກແຮງງານ ຕ້ານແອກປົກຄອງ ຂອງນາຍທຶນ ຜູກຂາດ, ຕ້ານທົ່ວທັງລະບົບການປົກຄອງລັດແບບຜູກຂາດນັບມື້ເພີ່ມທະວີຂຶ້ນ; ໄຊຊະນະຂອງຂະບວນການປົດປ່ອຍຊາດ ເຕີບໃຫຍ່ຂະຫຍາຍ ຕົວຢ່າງ ຟົດຟື້ນ ແລະ ໄດ້ໄຂຂອບຟ້າໃໝ່ໃຫ້ແກ່ບັນດາປະເທດ ທີ່ໄດ້ຮັບ ການປົດປ່ອຍຈາກແອກຂອງລັດທິລ່າເມືອງຂຶ້ນແບບເກົ່າ ແລະ ລັດທິລ່າເມືອງຂຶ້ນ-ແບບໃໝ່; ຂະບວນການປະຊາທິປະໄຕລວມ ຕ້ານຈັກກະພັດນິຍົມ ມີຂະໜາດອັນກວ້າງຂວາງ.

ວ.ອີ.ເລນິນ ໄດ້ໄຈ້ແຍກການພັງທະລາຍຂອງຈັກກະພັດນິຍົມວ່າ ກ່ອນອື່ນໝົດເປັນຄືຜົນຂອງການທ້ອນໂຮມການປະຕິວັດສັງຄົມນິຍົມ ແລະ ການປະຕິວັດປົດປ່ອຍຊາດເຂົ້າກັນ. ໃນໄລຍະປະຈຸບັນນີ້ ການປະຕິວັດສອງປະການນີ້ມີຄວາມໝາຍຕັດສິນຊີ້ຂາດ. ຈຸດພິເສດຂອງການປະຕິວັດຊາດ-ປະຊາທິປະ-ໄຕໃນໄລຍະປະຈຸບັນນີ້ ແມ່ນວ່າການປະຕິວັດດັ່ງກ່າວແກ້ໄຂບັນດາໜ້າທີ່ທີ່ພົວພັນກັນຢ່າງເປັນລຳດັບເຊັ່ນ ການບັນລຸຄວາມເປັນເອກະລາດແຫ່ງຊາດ ແລະ ຮັບປະກັນຄວາມເປັນເອກະລາດທາງດ້ານເສດຖະກິດ. ການແກ້ໄຂໜ້າທີ່ດັ່ງກ່າວນີ້ ຍັງແມ່ນການແກ້ໄຂບັນຫາສັງຄົມອື່ນໆອີກດ້ວຍ. ຈາກນີ້ຈຶ່ງມີຄວາມສຳຄັນໃນການເລືອກເອົາວິທີການ ແລະ ພາຫະນະສຳລັບກໍ່ສ້າງສັງຄົມໃໝ່.

ໜຶ່ງໃນຈຳນວນເສັ້ນທາງດັ່ງກ່າວນີ້ ແມ່ນເສັ້ນທາງແຫ່ງການຂະ ຫຍາຍຕົວແບບບໍ່ແມ່ນທຶນນິຍົມຫລືທ່າອຽງໄປສູ່ສັງຄົມນິຍົມ. ໃນການໄຈ້ແຍກ ແນວທາງຍຸດທະສາດ ແລະ ຍຸດໂທບາຍຂອງບັນດາພັກກອມມູນິດໃນຂະບວນ ການປົດປ່ອຍຊາດ ເລນິນ ໄດ້ຂຽນວ່າ ໂດຍອີງໃສ່ຊົນຊັ້ນກຳມາຊີບ ຂອງບັນ ດາປະເທດກ້າວໜ້າ, ບັນດາປະເທດຫລ້າຫລັງສາມາດກ້າວຂຶ້ນສູ່ສັງຄົມ ນິຍົມໂດຍບໍ່ຜ່ານໄລຍະການຂະຫຍາຍຕົວຂອງທຶນນິຍົມ.[໑]

ຄວາມອາດສາມາດນີ້ໄດ້ກາຍເປັນຄວາມຈິງ, ສາມາດບັນລຸພຶດຕິກຳ ຕົວ

---

໑) ວ.ອີ.ເລນິນ.ບົດນິພົນຄົບຊຸດ.ເຫລັ້ມທີ ໔໑, ໜ້າ ໒໔໖.

ຈິງ ກໍຍ່ອມມີການສ້າງຕັ້ງ ແລະ ຂະຫຍາຍຕົວຂອງລະບົບສັງຄົມນິຍົມ ແຫ່ງໂລກ ແລະ ການເພີ່ມທະວີພົນກະທົບຂອງລະບົບສັງຄົມນິຍົມຕໍ່ບາດກ້າວ ຂະຫຍາຍຕົວຂອງສັງຄົມ.

ລັກສະນະຂອງເສັ້ນທາງຂະຫຍາຍຕົວແບບບໍ່ແມ່ນທຶນນິຍົມມີດັ່ງຕໍ່ໄປນີ້:

ການປະຕິວັດຊາດປະຊາທິປະໄຕ ໄດ້ລົງເລິກ ແລະ ດຳເນີນໄປຈົນເຖິງຂັ້ນສຸດທ້າຍ, ກ້າວຂຶ້ນເປັນການປະຕິວັດສັງຄົມນິຍົມເທື່ອລະກ້າວ ແລະ ໃນທີ່ສຸດເປັນການກໍ່ສ້າງສັງຄົມ ສັງຄົມນິຍົມ;

ໄລຍະຂ້າມຜ່ານຈາກຮູບແບບການຂະຫຍາຍຕົວແບບເມືອງຂຶ້ນທີ່ຫລ້າຫລັງກ້າວຂຶ້ນສູ່ສັງຄົມນິຍົມ, ໄລຍະປະຕິບັດການດັດສ້າງປະຊາທິປະໄຕ ແລະຕາມຈັກກະພັດນິຍົມຢ່າງສຸດຂີດ.

ດຳເນີນການກໍ່ສ້າງປະຖົມປັດໄຈດ້ານເສດຖະກິດ, ສັງຄົມ ແລະ ການເມືອງສຳລັບກໍ່ສ້າງສັງຄົມນິຍົມໃຫ້ສຳເລັດ.

ໃນບັນດາປະເທດທີ່ກ້າວຂຶ້ນສູ່ເສັ້ນທາງແຫ່ງການຂະຫຍາຍຕົວແບບບໍ່ແມ່ນທຶນນິຍົມນັ້ນ ອຳນາດການປົກຄອງແມ່ນຢູ່ໃນກຳມືຂອງບັນດານັກປະຊາທິປະໄຕປະຕິວັດ. ພວກເຂົາເຈົ້ານຳພາການຕໍ່ສູ້ເພື່ອປົບປຸງຄວາມເປັນເອກະລາດ - ແຫ່ງຊາດ, ເພື່ອເປີດກວ້າງ ແລະ ເສີມຂະຫຍາຍປະຊາທິປະໄຕ, ດຳເນີນການປະຕິວັດປະຊາທິປະໄຕຕ້ານຈັກກະພັດນິຍົມ ແລະສັກດີນາຈົນເຖິງຂັ້ນ ສຸດທ້າຍ, ເພື່ອຄວາມກ້າວໜ້າທາງສັງຄົມ, ກໍ່ສ້າງສັງຄົມນິຍົມໃຫ້ສຳເລັດ.

ການຂະຫຍາຍຕົວຂອງຂະບວນການປະຕິວັດໂລກໃນຍຸກສະໄໝໃໝ່ນີ້ໄດ້ຢືນຢັນທິດສະດີ ເລນິນ ກ່ຽວກັບກົດເກນລວມຂອງການປະຕິວັດສັງຄົມນິຍົມ - ແລະ ຈຸດພິເສດຂອງກົດເກນດັ່ງກ່າວຢູ່ໃນບາງປະເທດໂດຍສະເພາະ. ເລນິນໄດ້ຂຽນວ່າ: " ທຸກໆປະຊາຊາດຈະກ້າວໄປເຖິງສັງຄົມນິຍົມ, ອັນນີ້ແມ່ນສິ່ງທີ່ຫລີກເວັ້ນບໍ່ໄດ້, ແຕ່ວ່າບໍ່ໄປເຖິງແບບດຽວກັນ, ແຕ່ລະປະຊາຊາດປະກອບສ່ວນເຮັດໃຫ້ຜະເດັດການກຳມາຊີບມີຈຸດພິເສດແບບນັ້ນ ຫລືແບບນີ້, ເຮັດໃຫ້ມີຈັງຫວະແຕກຕ່າງກັນໃນການດັດສ້າງສັງຄົມນິຍົມຢູ່ໃນຂົງເຂດຕ່າງໆຂອງ ຊີວິດສັງຄົມ"[໑]. ບັນດາຈຸດພິເສດໃນການຂະຫຍາຍຕົວແບບປະຕິວັດ ຂອງແຕ່

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມທີ ໓໐, ໜ້າ ໑໔໓.

ລະປະເທດອື່ນກັບລັກສະນະ ແລະ ຄວາມຮ້າຍແຮງຂອງຄວາມຂັດແຍ່ງ ຂອງການຊ່ວງຊາກຳລັງລະຫວ່າງບັນດາຊຸມຊົນ. ດ້ວຍເຫດນັ້ນ ບັນດາພັກທີ່ໄດ້ກ້າວຂື້ນສູ່ເສັ້ນທາງແຫ່ງການຕໍ່ສູ້ເພື່ອສັງຄົມນິຍົມນັ້ນ ຕ້ອງຄຳນຶງເຖິງເງື່ອນໄຂລະອຽດຂອງປະເທດຕົນ. ການຖືສຳຄັນກົດເກນລວມ ແລະ ເບິ່ງຂ້າມຈຸດພິເສດສະເພາະຂອງຊາດ ຫລືກົງກັນຂ້າມ, ເຮັດໃຫ້ເງື່ອນໄຂທ້ອງຖິ່ນເປັນລັກ ສະນະເດັດຖານ ແລະ ຖືເບົາຄວາມຮຽກຮ້ອງຂອງບັນດາກົດເກນລວມນັ້ນ ລ້ວນແຕ່ຈະນຳໄປເຖິງຄວາມຜິດພາດຢ່າງແນ່ນອນ, ສ້າງອຸປະສັກຢ່າງຫລວງຫຼາຍໃຫ້ແກ່ເສັ້ນທາງກ້າວຂື້ນສັງຄົມນິຍົມ.

ທິດສະດີມາກ-ເລນິນ ກ່ຽວກັບການປະຕິວັດສັງຄົມ, ໂດຍສະເພາະກ່ຽວກັບລະດັບສູງສຸດຂອງມັນຄືການປະຕິວັດສັງຄົມນິຍົມນັ້ນ ແມ່ນພື້ນຖານທີ່ຫມັ້ນຄົງດ້ານກຳມະວິທີວິທະຍາ ແລະ ທິດສະດີແຫ່ງການດັດສ້າງໂລກບົນພື້ນຖານ ສັງຄົມນິຍົມ, ແມ່ນພື້ນຖານແຫ່ງການກໍ່ສ້າງສັງຄົມນິຍົມ ແລະ ກອມມູນິດນິຍົມໃຫ້ສຳເລັດ.

## ພາກທີ ຫົກ

## ລະບົບການເມືອງ ຂອງສັງຄົມ

ຊີວິດການເມືອງຂອງສັງຄົມ ດຳເນີນໄປໃນຂອບເຂດຂອງລະບົບ ການເມືອງທີ່ແນ່ນອນ. ການພົວພັນການເມືອງກວມລວມເອົາການພົວພັນລະຫວ່າງຊົນຊັ້ນ, ລະຫວ່າງປະຊາຊາດ ແລະ ລັດ ກ່ອນອື່ນຫມົດໃນຂົງເຂດການ ຂະຫຍາຍຕົວຂອງສັງຄົມທີ່ມີຊີວິດຊີວາກວ່າ ເຊັ່ນການຍາດເອົາ ແລະ ຫມູນ ໃຊ້ອຳນາດການປົກຄອງຂອງລັດ, ການເສີມຂະຫຍາຍປະຊາທິປະໄຕ, ບັນ ຫາກ່ຽວກັບສົງຄາມ, ສັນຕິພາບ ແລະ ການປະຕິວັດ. ລັດທິວັດຖຸນິຍົມ ປະຫວັດວິພາກ ຄົ້ນຄວ້າທຳມະຊາດຂອງລະບົບການເມືອງ, ຄົ້ນຄວ້າການທີ່ມັນຂຶ້ນກັບໂຄງລ່າງເສດຖະກິດ ແລະ ໂຄງປະກອບທາງສັງຄົມຂອງສັງຄົມ.

ລະບົບການເມືອງຂອງສັງຄົມ ແມ່ນລະບົບສະຖາບັນຊະນິດພິເສດ, ເຊິ່ງອີງໃສ່ລະບົບສະຖາບັນດັ່ງກ່າວ ມີການດັດແປງການພົວພັນທາງດ້ານ ສັງຄົມ ແລະ ການເມືອງໃນສັງຄົມ. ລະບົບການເມືອງ ມີລັກສະນະຊົນຊັ້ນ, ເປັນຕົວແທນ ແລະ ຜູ້ປົກປັກຮັກສາຜົນປະໂຫຍດຂອງຊົນຊັ້ນປົກຄອງ (ໃນສັງຄົມ ສັງຄົມນິຍົມ ແມ່ນຜົນປະໂຫຍດຂອງຊາວຜູ້ອອກແຮງງານທຸກຄົນ). ໃນໂຄງ ປະກອບລະບົບການເມືອງຂອງແຕ່ລະສັງຄົມ ລ້ວນແຕ່ມີສ່ວນປະກອບດັ່ງຕໍ່ໄປນີ້ : ລັດ ແລະ ອົງການຂອງລັດ, ພັກການເມືອງ, ອົງການຈັດຕັ້ງມະຫາຊົນ,ສະຫະພັນປະເພດຕ່າງໆ. ລັດ, ພັກ ແລະ ອົງການຈັດຕັ້ງມະຫາຊົນ (ເຊັ່ນກຳມະບານ, ນັກສຶກສາ, ແມ່ຍິງ, ຊາວຫນຸ່ມ ແລະ ອື່ນໆ) ລ້ວນແຕ່ມີ ລັກສະນະການເມືອງອັນຈະແຈ້ງ. ບາງອົງການຈັດຕັ້ງຂອງນັກປະດິດສ້າງ ( ເຊັ່ນສະຫະພັນນັກແຕ້ມ, ນັກຂຽນ, ນັກແຕ່ງດົນຕີ ), ສະມາຄົມວັດທະນະທຳ - ແລະ ກິລາບໍ່ມີລັກສະນະການເມືອງອັນຈະແຈ້ງ, ແຕ່ຫາກຍັງຄົງຮັກສາ ທາດ

ແທ້ດ້ານຊົນຊັ້ນຂອງຕົນ.

ລະບົບການເມືອງຂອງສັງຄົມຖືກກຳນົດດ້ວຍໂຄງລ່າງເສດຖະກິດ ແລະ ແມ່ນພາກສ່ວນທີ່ສຳຄັນທີ່ສຸດຂອງໂຄງບົນ. ໂດຍເປັນຄືພາກສ່ວນໜຶ່ງ ຂອງໂຄງບົນ ລະບົບການເມືອງ ໄດ້ຮັບການສ້າງຕັ້ງຂຶ້ນມາ ໂດຍອີງຕາມກົດເກນແຫ່ງການຂະຫຍາຍຕົວຂອງໂຄງບົນ. ພ້ອມກັນນັ້ນ ລະບົບການເມືອງມີຄວາມໃກ້ຊິດກັບໂຄງລ່າງເສດຖະກິດກວ່າພາກສ່ວນອື່ນໆໃນໂຄງບົນ, ສ່ອງແສງເຖິງການປ່ຽນແປງໃນໂຄງລ່າງໄດ້ໄວກວ່າ. ຍ້ອນມີຈຸດພິເສດນີ້ ລະບົບການ - ເມືອງຈຶ່ງສາມາດກະທົບຢ່າງມີປະສິດທິພາບຕໍ່ທຸກໆດ້ານແຫ່ງການຂະຫຍາຍຕົວຂອງສັງຄົມ, ໂດຍຊຸກຍູ້ຫລືຖ່ວງດຶງການຂະຫຍາຍຕົວດັ່ງກ່າວ ໂດຍຂຶ້ນກັບຈຸດປະສົງ ແລະ ຜົນປະໂຫຍດດ້ານຊົນຊັ້ນ.

## ໑. ລະບົບການເມືອງຂອງສັງຄົມນາຍທຶນ

ປະຫວັດສາດມີລະບົບການເມືອງສາມປະເພດ ໃນສັງຄົມທີ່ມີການກົດຂີ່ຂູດຮີດ ເຊັ່ນແບບເຈົ້າທາດ, ສັກດີນາ ແລະ ທຶນນິຍົມ ທີ່ສອດຄ່ອງກັບຮູບ ຖານຈັດຕັ້ງສັງຄົມ-ເສດຖະກິດທີ່ແນ່ນອນ.

ລະບົບການເມືອງໄດ້ກຳເນີດຂຶ້ນມາພ້ອມກັນກັບການແບ່ງສັງຄົມອອກເປັນຊົນຊັ້ນ. ລະບົບການເມືອງຂອງສັງຄົມ ທີ່ມີຄວາມເປັນປໍລະປັກກັນນັ້ນ ແບ່ງອອກເປັນສອງພາກສ່ວນ ທີ່ຂັດແຍ່ງກັນ. ພາກສ່ວນທີ່ໜຶ່ງ ແມ່ນບັນດາ ອົງການຈັດຕັ້ງ ແລະ ສະຖາບັນຂອງຊົນຊັ້ນປົກຄອງ ທີ່ຄວບຄຸມທາງເສດຖະ ກິດ ແລະ ການເມືອງ ຊຶ່ງປະຕິບັດຜະເດັດການ ຂອງຊົນຊັ້ນດັ່ງກ່າວ. ພາກສ່ວນທີ່ສອງ ແມ່ນລະບົບອົງການຈັດຕັ້ງຂອງຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງ ແລະ ຊົນຊັ້ນນີ້ ອີງໃສ່ລະບົບດັ່ງກ່າວ ທຳການຕໍ່ສູ້ເພື່ອປົດປ່ອຍຕົນເອງ (ໃນເງື່ອນໄຂທຶນນິຍົມ ອັນນີ້ແມ່ນພັກກອມມູນິດ ແລະ ພັກກຳມະກອນ, ອົງການຈັດຕັ້ງ ກຳມະບານ, ຊາວໜຸ່ມແລະ ອື່ນໆ ).

ສ່ວນປະກອບຕົ້ນຕໍຂອງລະບົບການເມືອງແມ່ນລັດ ພ້ອມດ້ວຍລະບົບ ສາຍໄຍຂອງບັນດາອົງການນິຕິບັນຍັດ, ບໍລິຫານ ແລະ ຕຸລາການ. ລັດບໍ່ໄດ້ລອຍຢູ່

ຢ່າງຕໍ່ເນື່ອງຕະຫລອດມາ. ໃນຖານະເປັນອາວຸດຂອງຊົນຊັ້ນໜຶ່ງເພື່ອ ປົກຄອງຊົນຊັ້ນອື່ນ ລັດຫາກໍ່ໄດ້ສ້າງຕັ້ງຂຶ້ນມາ ພຽງແຕ່ພ້ອມກັນກັບການເກີດມີກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດ ແລະ ພ້ອມກັນກັບການປະກົດຕົວຂອງບັນດາຊົນຊັ້ນທີ່ປໍລະປັກກັນ. ລັດແມ່ນຜະລິດຕະພັນ ແລະ ການປະກົດຕົວຂອງລັກສະນະບໍ່ປະນີປະນອມໃນຄວາມຂັດແຍ່ງກັນ ລະຫວ່າງບັນດາຊົນຊັ້ນ . ທາດແທ້ດ້ານຊົນຊັ້ນຂອງລັດ ທີ່ມີພວກກົດຂີ່ຂູດຣີດນັ້ນ ສະແດງອອກຢູ່ບ່ອນທີ່ວ່າ ມັນແມ່ນກົງຈັກຂອງຊົນຊັ້ນໜຶ່ງ ທີ່ປົກຄອງອີກຊົນຊັ້ນໜຶ່ງ, ແມ່ນອາວຸດ ປາບປາມບັນດາຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງ.

ລັດຂອງພວກກົດຂີ່ຂູດຣີດມີສາມປະເພດຄືລັດຂອງເຈົ້າທາດ, ສັກດີນາ - ແລະ ທຶນນິຍົມ. ລັດແຕ່ລະປະເພດສອດຄ່ອງກັບຮູບຖານຈັດຕັ້ງສັງຄົມຂອງລັດນັ້ນໆ.

ຄວນໄຈ້ແຍກຄວາມແຕກຕ່າງກັນ ລະຫວ່າງປະເພດຂອງລັດກັບຮູບ ແບບການປົກຄອງຂອງລັດ. ຖ້າຫາກປະເພດຂອງລັດສະແດງເຖິງທາດແທ້ທາງຊົນຊັ້ນຂອງລັດແລ້ວ ແມ່ນວ່າຮູບແບບການປົກຄອງ ສະແດງເຖິງວິທີການຈັດຕັ້ງ, ສະຖາບັນການເມືອງ ແລະ ອື່ນໆ, ທີ່ປະຕິບັດພະເດັດການຂອງຊົນຊັ້ນ. ຮູບແບບການປົກຄອງຂຶ້ນກັບການຊົ່ງຊາກຳລັງລະຫວ່າງບັນດາຊົນຊັ້ນ, ຂຶ້ນກັບລະດັບການຂະຫຍາຍຕົວດ້ານເສດຖະກິດ ແລະ ວັດທະນະທຳຂອງປະເທດ, ຂຶ້ນກັບມູນເຊື້ອແຫ່ງຊາດ, ເງື່ອນໄຂສາກົນ. ເຊັ່ນ ໃນບັນດາປະເທດນາຍ ທຶນສະໄໝປະຈຸບັນນີ້ ມີຮູບແບບການປົກຄອງຄື: ລາຊາທິປະໄຕພາຍໃຕ້ລັດຖະທຳມະນູນ ( ຕົວຢ່າງຄືຢູ່ອັງກິດ, ແບນຊິກ, ຊູແອດ), ສາທາລະນະລັດປະຊາທິປະໄຕນາຍທຶນ ( ຢູ່ສະຫະລັດອາເມລິກາ, ຝະລັ່ງ, ອີຕາລີແລະອື່ນໆ) ໃນບາງປະເທດນາຍທຶນ ເຄີຍມີ ແລະ ຍັງມີລະບອບພະເດັດການຟາດຊິດ - ( ເຢຍລະມັນສະໄໝຮິດແລ, ແອສປາຍ ສະໄໝ ຟຣັງໂກ, ລະບອບ ທະຫານຢູ່ ຊິເລ ). ການຂ້າມຜ່ານຈາກຮູບແບບການປົກຄອງໜຶ່ງ ໄປສູ່ ອີກແບບໜຶ່ງນັ້ນ ບໍ່ໝາຍເຖິງການປ່ຽນແປງປະເພດຂອງລັດ, ເນື່ອງຈາກ ວ່າທາດແທ້ຂອງລັດຂອງພວກກົດຂີ່ຂູດຣີດ, ພະເດັດການຂອງຊົນຊັ້ນປົກຄອງ ຍັງຮັກສາໄວ້ຢ່າງເຕັມສ່ວນຢູ່. ສຳລັບຊົນຊັ້ນກຳມາຊີບແລະພັກລັດທິມາກ ຂອງເຂົາເຈົ້າແລ້ວ ບໍ່ອາດ ເມີນເສີຍຕໍ່ຮູບແບບການປົກຄອງໃນລັດອັນແນ່ນອນ.

ໃນເງື່ອນໄຂປະຊາທິປະໄຕນາຍທຶນທີ່ຈຳກັດ, ເຖິງແມ່ນວ່າຈະເປັນ ປະຊາທິປະໄຕແບບບໍ່ສະເໝີຕົ້ນສະເໝີປາຍກໍ່ຕາມ, ແຕ່ການອົບຂວາຍຊາວຜູ້ ອອກແຮງງານເຂົ້າໃນການຕໍ່ສູ້ຢ່າງເດັດດ່ຽວຕ້ານທຶນຜູກຂາດ, ປົກປັກຮັກສາ ຜົນປະໂຫຍດຂອງພວກເຂົາເຈົ້ານັ້ນ ກ້ວາຍກວ່າຫລາຍຖ້າປຽບທຽບໃສ່ສະຖານະການທີ່ມີການກຳລາບປາບປາມແບບຟາດຊິດ.

ລັດຂອງພວກ ກົດຂີ່ຂູດຮີດປະຕິບັດສອງໜ້າທີ່ພື້ນຖານຄືໜ້າທີ່ພາຍໃນ - (ປົກປັກຮັກສາກຳມະສິດສ່ວນຕົວ ແລະ ປາບປາມການຕ້ານຢັນຂອງຊາວ ຜູ້ ອອກແຮງງານ ) ແລະ ໜ້າທີ່ພາຍນອກ ( ປົກປັກຮັກສາຜົນປະໂຫຍດຂອງຊົນຊັ້ນປົກຄອງໃນການພົວພັນລະຫວ່າງຊາດ). ໜ້າທີ່ຕົ້ນຕໍແມ່ນໜ້າທີ່ ພາຍໃນ, ມັນສະແດງເຖິງທຳມະຊາດທາງຊົນຊັ້ນຂອງລັດ ແລະ ໄດ້ຮັບການປະຕິບັດຢູ່ໃນນະໂຍບາຍການເມືອງພາຍໃນຂອງມັນ. ນະໂຍບາຍການເມືອງພາຍນອກຂອງຊົນຊັ້ນປົກຄອງອອກມາຈາກການເມືອງພາຍໃນ ແລະ ແມ່ນການເພີ່ມຕື່ມໃຫ້ແກ່ນະໂຍບາຍປາບປາມຊາວຜູ້ອອກແຮງງານ ແລະ ທຸກໆກຳລັງທີ່ກ້າວໜ້າ.

ລັດປະຕິບັດໜ້າທີ່ຂອງຕົນໂດຍໝູນໃຊ້ເຄື່ອງມືປັບປຸງການພົວພັນທາງສັງຄົມທີ່ສຳຄັນຄືກົດໝາຍ. ກົດໝາຍໄດ້ເກີດຂຶ້ນມາພ້ອມກັນກັບລັດ ແລະ ປະກອບເປັນໂຄງປົນດ້ານກົດໝາຍຂອງລັດ. ກົດໝາຍແມ່ນການສັງລວມບັນດາມາດຕະຖານຂອງການປະພຶດຕົວ, ທີ່ໄດ້ກຳນົດໄວ້ໃນບັນດາກົດໝາຍແລະລັດເປັນຜູ້ຮັບຮອງເອົາກົດ ໝາຍດັ່ງກ່າວ. ກ.ມາກ ແລະ ຟ.ອັງແກນໄດ້ຂຽນກ່ຽວກັບກົດໝາຍຂອງນາຍທຶນດັ່ງນີ້: "...ກົດໝາຍຂອງພວກທ່ານ ເປັນພຽງເຈດຈຳນົງຂອງຊົນຊັ້ນຂອງພວກທ່ານທີ່ຮັບຮອງເອົາເປັນກົດໝາຍ,ແມ່ນເຈດຈຳນົງເຊິ່ງເງື່ອນໄຂດ້ານວັດຖຸຂອງຊີວິດຂອງຊົນຊັ້ນພວກທ່ານເປັນສິ່ງກຳນົດໄວ້"[໑]. ກົດໝາຍໃນສັງຄົມທີ່ມີຄວາມເປັນປໍລະປັກກັນເຮັດໃຫ້ມາດຕະຖານທີ່ຄອບຄອງການພົວພັນລະຫວ່າງຜູ້ຄົນທີ່ເປັນເຈົ້າກຳມະສິດນັ້ນ ຖືກຕ້ອງຕາມກົດໝາຍ, ກຳນົດການພົວພັນດ້ານເສດຖະກິດ ແລະ ການພົວພັນ ລະຫວ່າງຊົນຊັ້ນ ແລະ ຊັ້ນຄົນໃນສັງຄົມທີ່ຂຶ້ນກັບການພົວພັນດ້ານເສດຖະກິດ ດັ່ງ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມທີ ໔, ໜ້າ ໔໔໓.

ກ່າວ; ກຳນົດຖານະຂອງຄອບຄົວ, ການພົວພັນເຊິ່ງກັນ ແລະ ກັນລະຫວ່າງສະມາຊິກໃນຄອບຄົວ, ຖານະຂອງບັນດາຊົນຊາດສ່ວນຫນ້ອຍ; ສ້າງຕັ້ງຖານະດ້ານສິດທິຂອງສະຖາບັນສັງຄົມ, ອົງການຈັດຕັ້ງ ແລະ ອົງການສາສະ - ຫນາ, ກຳນົດຖານະ, ສິດທິ ແລະ ຫນ້າທີ່ຂອງພົນລະເມືອງແຕ່ລະບຸກຄົນ.

ພັກ ແມ່ນຫນຶ່ງໃນສ່ວນປະກອບທີ່ສຳຄັນໃນລະບົບການເມືອງ. ມັນແມ່ນພາກສ່ວນທີ່ຕັ້ງຫນ້າ ແລະ ມີການຈັດຕັ້ງຂອງຊົນຊັ້ນ ຫລືຊົນຄົນໃດຫນຶ່ງທີ່ເປັນຕົວແທນໃຫ້ແກ່ຜົນປະໂຫຍດຂອງມັນ. ຕາມ ທຳມະດາແລ້ວ ໃນສັງຄົມ ນາຍທຶນມີພັກການເມືອງຈຳນວນຫນຶ່ງ, ອັນນີ້ມັນພົວພັນກັບຄວາມຂັດແຍ່ງລະຫວ່າງບັນດາຊົນຊັ້ນ ແລະ ຊັ້ນຄົນໃນສັງຄົມ. ເຖິງວ່າຈະມີຫລາຍພັກກໍ່ຕາມ, ແຕ່ພັກທີ່ກຳອຳນາດໃນລັດນາຍທຶນ, ຕາມຫລັກການແລ້ວ ແມ່ນພັກຂອງພວກນາຍທຶນຜູກຂາດຫລືພັກທີ່ສະຫນັບສະຫນູນການປະຕິຮູບ ໃນຂອບເຂດຂອງທຶນນິຍົມ , ເພື່ອສ້າງຄວາມປອງດອງລະຫວ່າງຊົນຊັ້ນ. ນາຍທຶນຫມູນໃຊ້ລະບົບມີຫລາຍ-ພັກ ເພື່ອຫລອກລວງຊາວຜູ້ອອກແຮງງານໃຫ້ປະລະຈາກການຕໍ່ສູ້ຊົນຊັ້ນ, ສ້າງພາບລວງຕາແຫ່ງປະຊາທິປະໄຕຂອງສັງຄົມທຶນນິຍົມ.

ຜູ້ຕາງຫນ້າໃຫ້ແກ່ຜົນປະໂຫຍດຂອງຊາວຜູ້ອອກແຮງງານທີ່ສະເຫມີຕົ້ນສະເຫມີປາຍກວ່າຫມູ່ນັ້ນ ແມ່ນພັກກອມມູນິດ ແລະ ພັກກຳມະກອນ.

ລະບົບການເມືອງຂອງສັງຄົມນາຍທຶນ ສະແດງໃຫ້ເຫັນເຖິງວິກິດ ການຂອງປະຊາທິປະໄຕນາຍທຶນ ທີ່ນັບມື້ເລິກເຊິ່ງ. ໃນສັງຄົມທີ່ມີຊົນຊັ້ນ ປະຊາທິປະໄຕຫມາຍເຖິງຜະເດັດການຂອງຊົນຊັ້ນກຳອຳນາດ. ວ.ອິ.ເລນິນໄດ້ຂຽນວ່າ: "...ໃນສັງຄົມນາຍທຶນ ພວກເຮົາໄດ້ມີປະຊາທິປະໄຕທີ່ຖືກຈຳກັດລົງ, ທີ່ເປັນຫນ້າສັງເວດ, ຈອມປອມ, ປະຊາທິປະໄຕສະເພາະແຕ່ຄົນຮັ່ງມີ, ສະເພາະແຕ່ຄົນສ່ວນຫນ້ອຍເທົ່ານັ້ນ". ໑) ຄວາມສະເຫມີພາບຮູບນອກໃນ ດ້ານການເມືອງ ທີ່ປະຊາທິປະໄຕນາຍທຶນໄດ້ປະກາດອອກມານັ້ນ ຝືນກັບການ ພົວພັນທີ່ມີການກົດຂີ່ຂູດຮີດໃນເງື່ອນໄຂທຶນນິຍົມ. ໃນຈຳນວນພົນລະເມືອງຊົນຄົນທີ່ຮັ່ງມີຈະເປັນຜູ້ໄດ້ຊົມໃຊ້ສິດເສລີພາບຂອງບຸກຄົນກ່ອນ. ສິດເສລີພາບໃນການພິມນຳເອົາຜົນປະໂຫຍດໃຫ້ແກ່ການຜູກຂາດຂອງນາຍທຶນເຊິ່ງເປັນຜູ້ ກວດກາ

---

໑) ວ.ອິ.ເລນິນ. ນິພົນຄົບຊຸດ. ເຫລັ້ມທີ ໓໓, ຫນ້າ ໓໐.

ໜັງສືພິມ, ວາລະສານ, ສະຖານີວິທະຍຸ ແລະ ໂທລະພາບ ແລະພາຫະນະສື່ສານອັນຫລວງຫລາຍອື່ນໆ ທີ່ພະຍາຍາມເຮັດໃຫ້ທາງສຽງມະຫາຊົນໄປຕາມທິດທາງທີ່ພວກເຂົາເຈົ້າຕ້ອງການ.

ພ້ອມກັນນັ້ນ ເມື່ອວິພາກວິຈານລັກສະນະຈຳກັດ ແລະ ຮູບນອກຂອງ ປະຊາທິປະໄຕນາຍທຶນ ລັດທິມາກ-ເລນິນ ຮັບຮູ້ລັກສະນະກ້າວໜ້າຂອງມັນ ຖ້າສົມທຽບກັບຮູບແບບຜະເດັດການຂອງນາຍທຶນແບບອື່ນໆ(ເຊັ່ນລັດທິຟາດຊິດ). ໃນເງື່ອນໄຂປະຊາທິປະໄຕນາຍທຶນ ການຂະຫຍາຍຕົວຂອງຂະບວນການ ກຳມະກອນມີຄວາມອາດສາມາດຢ່າງກວ້າງຂວາງກວ່າ.

## ໔. ລະບົບການເມືອງຂອງສັງຄົມ ສັງຄົມນິຍົມ

ພ້ອມກັນກັບການປະຕິວັດສັງຄົມນິຍົມ ໄດ້ຮັບໄຊຊະນະ ແລະຜະເດັດການຂອງຊົນຊັ້ນກຳມາຊີບໄດ້ຮັບການສ້າງຕັ້ງຂຶ້ນມາ ລະບົບການເມືອງຂອງສັງຄົມກໍໄດ້ເກີດມີຂຶ້ນມາ, ໄດ້ຮັບການຂະຫຍາຍຕົວ, ແລະ ໄດ້ຮັບການຢັ້ງຢືນຢ່າງສົມບູນພາຍຫລັງທີ່ໄດ້ສຳເລັດການກໍ່ສ້າງສັງຄົມນິຍົມ. ລັດໃນໄລຍະຂ້າມຜ່ານຈາກທຶນນິຍົມຂຶ້ນສູ່ສັງຄົມນິຍົມ ແມ່ນຜະເດັດການກຳມາຊີບ ໃນຮູບແບບນີ້ ຫລືຮູບແບບນັ້ນ.

ຜະເດັດການຂອງຊົນຊັ້ນກຳມາຊີບ ແມ່ນອາວຸດຂອງການປົກຄອງ ດ້ານການເມືອງຂອງຊົນຊັ້ນກຳມະກອນ. ມັນໄດ້ສ້າງຕັ້ງຂຶ້ນພາຍຫລັງທີ່ໄດ້ລົບລ້າງລະບອບນາຍທຶນ ແລະ ໄດ້ທັບມ້າງກົງຈັກລັດຂອງນາຍທຶນ.

ລັດທິມາກ-ເລນິນ ໄດ້ພິສູດວ່າ ພຶດຕິກຳຕົວຈິງດ້ານສັງຄົມ ໄດ້ຢືນຢັນລັກສະນະຈຳເປັນໃນທາງປະຫວັດສາດຂອງຜະເດັດການກຳມາຊີບ. ການ ຂ້າມຜ່ານຈາກທຶນນິຍົມກ້າວຂຶ້ນສູ່ສັງຄົມ ນິຍົມອາດສາມາດເປັນໄປໄດ້ພຽງແຕ່ໂດຍຜ່ານຜະເດັດການກຳມາຊີບເທົ່ານັ້ນ. ມັນແມ່ນອາວຸດຕົ້ນຕໍທາງດ້ານ ການເມືອງ ໃນການກໍ່ສ້າງສັງຄົມນິຍົມ. ພຽງແຕ່ອີງໃສ່ຜະເດັດການຂອງຕົນເທົ່ານັ້ນ ຊົນຊັ້ນກຳມາຊີບຈຶ່ງສາມາດປະຕິບັດໜ້າທີ່ປະຫວັດສາດຂອງຕົນ, ເຊັ່ນດັບສູນລັດທິທຶນນິຍົມ, ທັບມ້າງກົງຈັກລັດຂອງນາຍທຶນ, ປາບປາມພວກນາຍທຶນທີ່

ຖືກໂຄ່ນລົ້ມ, ປົກປັກຮັກສາການປະຕິວັດທີ່ມີໄຊຊະນະແລ້ວດ້ວຍກຳລັງທະຫານ ແລະ ກໍ່ສ້າງສັງຄົມໃໝ່. ດັ່ງທີ່ ກ.ມາກ ໄດ້ຊີ້ແຈງມາແລ້ວນັ້ນວ່າລະຫວ່າງ ທຶນນິຍົມ ແລະ ສັງຄົມນິຍົມ "ມີໄລຍະຜັນປ່ຽນແບບປະຕິວັດຈາກທຶນນິຍົມ ໄປ ສູ່ສັງຄົມນິຍົມ. ໄລຍະນີ້ສອດຄ່ອງກັບໄລຍະຂ້າມຜ່ານດ້ານການເມືອງແລະໃນ ໄລຍະນີ້ລັດບໍ່ອາດຈະເປັນແບບອື່ນໄດ້ນອກຈາກຜະເດັດການປະຕິວັດຂອງ ຊົນ ຊັ້ນກຳມາຊີບ "໑).

ບັນຫາກ່ຽວກັບການທັບມ້າງກົງຈັກລັດຂອງນາຍທຶນ ແມ່ນບັນຫາພື້ນ ຖານ ຂອງທິດສະດີມາກ-ເລນິນ ກ່ຽວກັບລັດ. ກົງຈັກລັດຂອງນາຍທຶນແມ່ນ ກົງຈັກ ກົດຂີ່ຂົ່ມເຫັງຊາວຜູ້ອອກແຮງງານ ແລະ ໃຊ້ບໍ່ໄດ້ສຳລັບການກໍ່ສ້າງສັງຄົມນິ-ຍົມ. ດ້ວຍເຫດນີ້ເອງທີ່ໃນຂະບວນວິວັດແຫ່ງການປະຕິວັດຈຶ່ງມີຄວາມຈຳເປັນ ຕ້ອງຍົກເລີກບັນດາອົງການອຳນາດການປົກຄອງ ແລະ ຄຸ້ມຄອງເກົ່າແລະປະ ກາດວ່າ ມັນແມ່ນສິ່ງຜິດກົດໝາຍ; ຍົກເລີກທະຫານ, ຕຳຫລວດ,ສານແລະ ອົງການແບບເກົ່າອື່ນໆທີ່ປາບປາມຊາວຜູ້ອອກແຮງງານ; ລົບລ້າງກົງຈັກບໍລິ-ຫານຂອງນາຍທຶນ ແລະ ກຸ່ມເຈົ້ານາຍອາດຍາສິດ, ເອົາຜູ້ຕາງໜ້າ ຂອງ ຊາວກຳມະກອນ, ຊາວນາ ແລະ ປັນຍາຊົນປະຕິວັດອື່ນແທນພວກເຂົາ; ລົບ ລ້າງກົດໝາຍແລະ ບົດບັນຍັດຕ່າງໆທີ່ຄ້ຳປະກັນອົງການລັດແບບເກົ່າ ແລະ-ລະບຽບກົດໝາຍແບບເກົ່າ, ແລະປະກາດວ່າ ກົດໝາຍດັ່ງກ່າວບໍ່ມີຜົນບັງ-ຄັບອີກແລ້ວ. ຄວນໄຈ້ແຍກວ່າ ສ່ວນໃດໃນກົງຈັກລັດແບບເກົ່າ ຕ້ອງຖືກ ດັບ ສູນຢ່າງເຕັມສ່ວນ ແລະ ຕ້ອງດັດສ້າງສ່ວນໃດແດ່. ເຊັ່ນຕົວຢ່າງ ຖ້າ ຫາກ ຕ້ອງຍົກເລີກກອງທັບແລະ ຕຳຫລວດແລ້ວ, ແມ່ນວ່າທະນາຄານ, ໄປສະນີ, ໂທລະຄົມມະນາຄົມ, ການຄຸ້ມຄອງການຍົນສົ່ງ ແລະ ການຄົມມະນາຄົມຕ້ອງ ໄດ້ຮັບການຮັກສາ ແລະ ດັດສ້າງບົນພື້ນຖານອັນໃໝ່.

ວ.ອີ.ເລນິນ ໄດ້ຕຳໜິພວກລັດທິສວຍໂອກາດໃນສາກົນທີ ສອງ * ທີ່

---

໑) ກ.ມາກ ແລະ ຟ.ອັງແກນ, ບົດນິພົນ.ເຫລັ້ມທີ ໑໙, ໜ້າ ໔໗

*) ສາກົນທີ ສອງແມ່ນສະຫະພັນພັກສັງຄົມນິຍົມສາກົນ, ສ້າງຕັ້ງຂຶ້ນ ໃນປີ ໑໘໘໙. ກ່ອນການລະເບີດຂອງສົງຄາມໂລກຄັ້ງທີໜຶ່ງ ມັນໄດ້ກາຍເປັນ ອົງ ການຈັດຕັ້ງທີ່ມີທັດສະນະຂອງລັດທິສວຍໂອກາດ.

ຖືວ່າ ເປັນສິ່ງອາດເປັນໄປໄດ້ ທີ່ຊົນຊັ້ນກຳມາຊີບ ສາມາດຍາດເອົາອຳນາດໄດ້ໂດຍບໍ່ຕ້ອງທັບມ້າງກົງຈັກລັດ ແລະ ຖືວ່າຈຸດປະສົງຕົ້ນຕໍຂອງການຕໍ່ສູ້ ຊົນຊັ້ນແມ່ນການຍາດເອົາສຽງສ່ວນຫລາຍຢູ່ໃນສະພາ. ບັນດານັກລັດທິແກ້ ຂຽວຂວາສະໄຫມໃຫມ່ພາກັນຢືນຢັນວ່າ ລັດນາຍທຶນຄືຈິ່ງວ່າບໍ່ແມ່ນອາວຸດແຫ່ງການປົກຄອງຂອງຊົນຊັ້ນອີກແລ້ວ. ມັນຄ່ອຍໆກາຍເປັນເຄື່ອງມືສຳລັບການປົດປ່ອຍຊາວຜູ້ອອກແຮງງານ. ອັນນີ້ແມ່ນການບິດເບືອນຢ່າງຕ່ຳຊ້າລັກສະນະ ຊົນຊັ້ນຂອງລັດຈັກກະພັດນິຍົມໃນສະໄຫມປະຈຸບັນ.

ການຂະຫຍາຍຕົວຂອງການປະຕິວັດຊາດ-ປະຊາທິປະໄຕຢູ່ລາວ ໄດ້ ຢັ້ງຢືນຄວາມຈຳເປັນຕ້ອງທັບມ້າງລັດຂອງພວກກົດຂີ່ຂູດຮີດ. ໃນລະດູຮ້ອນຂອງປີ ໑໙໗໕ ອົງການປົກຄອງທ້ອງຖິ່ນຂັ້ນຕາແສງ, ເມືອງ ແລະ ແຂວງໄດ້ຖືກລົບລ້າງ ແລະ ໄດ້ມີການເລືອກຕັ້ງສະພາປະຊາຊົນ, ໄດ້ສ້າງຕັ້ງຄະນະກຳມະ-ການປົກຄອງພາຍໃຕ້ການນຳພາຂອງແນວລາວຮັກຊາດ. ໃນປະເທດ ມີການດັດສ້າງອັນສຳຄັນທາງດ້ານການເມືອງ ແລະ ສັງຄົມຢ່າງເປັນລຳດັບ, ຢູ່ທຸກບ່ອນໄດ້ຈັດຕັ້ງສະພາຜູ້ແທນຂອງປະຊາຊົນ ໂດຍແມ່ນພົນລະເມືອງເປັນຜູ້ - ເລືອກຕັ້ງຂຶ້ນ. ພ້ອມກັນນັ້ນ ລະບອບລາຊາທິປະໄຕຖືກລົບລ້າງຢ່າງຕະຫລອດການ, ເສດເຫລືອຂອງກົງຈັກບໍລິຫານແບບເກົ່າ ກໍ່ຖືກລົບລ້າງໄປ.

ກ່ອນການປະຕິວັດ ກົງຈັກຂອງລັດແມ່ນອຳນາດການປົກຄອງລັກສະນະລ່າເມືອງຂຶ້ນແບບໃຫມ່, ໂດຍແມ່ນ ຈັກກະພັດອາເມລິກາເປັນຜູ້ຕັ້ງຂຶ້ນມາ. ນັ້ນແມ່ນກົງຈັກອາດຍາສິດ-ຂຸນເສິກທີ່ໃຫຍ່ໂຕມະໂຫລານ ພ້ອມທັງພາຫະນະປາບປາມເປັນຈຳນວນຫລວງຫລາຍ. ເລຂາທິການໃຫຍ່ສູນກາງ ພ.ປ.ປ.ລທ່ານໄກສອນ ພົມວິຫານ ຂຽນວ່າ: "ດ້ວຍເຫດນັ້ນ, ການຍຶດອຳນາດການ ປົກຄອງແມ່ນຕ້ອງທັບມ້າງກົງຈັກຄອບຄອງ, ເຄື່ອງມືປາບປາມ, ໂຄສະນາ,ລະບົບຫນີບຮັດທັງຫມົດ ແລະ ທຸກໆການຈັດຕັ້ງຂອງສັດຕູໃນທຸກຂົງເຂດ ເຄື່ອນໄຫວທີ່ແຕກຕ່າງກັນ ແຕ່ຂັ້ນເທິງລົງໄປຮອດຂັ້ນຮາກຖານສຸດ". ໑)

ຜະເດັດການຂອງຊົນຊັ້ນກຳມາຊີບ ແມ່ນລັດປະເພດໃຫມ່ໃນດ້ານ ຫລັກ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ ຫນ້າ ໔໐໙.

ການ, ເຊິ່ງຄຸນນະພາບແຕກຕ່າງກັນກັບທຸກໆປະເພດ ທີ່ມີມາກ່ອນແລ້ວນັ້ນໃນດ້ານທາດແທ້ທາງຊົນຊັ້ນ, ໃນດ້ານຮູບແບບຂອງການຈັດຕັ້ງລັດ,ບົດບາດທາງປະຫວັດສາດ. ຫລັກການສູງສຸດຂອງພະເດັດການຊົນຊັ້ນກຳມາຊີບ ແມ່ນພັນ-ທະພາບຊົນຊັ້ນກຳມາຊີບກັບຊາວນາ ແລະ ບັນດາຊັ້ນຄົນຊາວຜູ້ອອກແຮງງານໄຮ້ກຳມາຊີບອື່ນໆ.

ພະເດັດການກຳມາຊີບປະຕິບັດສອງໜ້າທີ່ອັນສະແດງເຖິງເນື້ອໃນ ທາງຊົນຊັ້ນຂອງມັນຄື ໜ້າທີ່ປາບປາມບັນດາຊົນຊັ້ນກົດຂີ່ຂູດຮີດ, ແລະ ພວກນາຍທຶນທີ່ຖືກໂຄ່ນລົ້ມລົງໄປແລ້ວຊຶ່ງເພີ່ມທະວີການຕໍ່ຕ້ານຂຶ້ນຢ່າງຫລວງຫລາຍ.ໂດຍອີງຕາມລະດັບຕໍ່ຕ້ານຂອງນາຍທຶນ ອີງຕາມເງື່ອນໄຂພາຍໃນ ແລະພາຍນອກເພິ່ນສາມາດນຳໃຊ້ເຄື່ອງມືປາບປາມທີ່ແຕກຕ່າງກັນ (ດ້ານເສດຖະກິດ,ການເມືອງແລະການທະຫານ). ຖ້າບໍ່ປາບປາມການຕໍ່ຕ້ານຂອງພວກນາຍທຶນແລ້ວຊົນຊັ້ນກຳມາຊີບກໍບໍ່ອາດສາມາດປົກປັກຮັກສາອຳນາດການປົກຄອງຂອງ ຕົນ ແລະ ກໍ່ສ້າງສັງຄົມໃໝ່ ໃຫ້ສຳເລັດໄດ້. ແຕ່ການປາບປາມບໍ່ແມ່ນໜ້າທີ່ຕົ້ນຕໍຂອງພະເດັດການກຳມາຊີບ.

ໜ້າທີ່ຕົ້ນຕໍຂອງພະເດັດການກຳມາຊີບ ແມ່ນໜ້າທີ່ລັກສະນະກໍ່ສ້າງທີ່ແນໃສ່ເພື່ອກໍ່ສ້າງສັງຄົມນິຍົມ, ກໍ່ສ້າງເສດຖະກິດໃໝ່, ກໍ່ສ້າງການພົວພັນ ສັງຄົມແບບໃໝ່. ວ.ອີ.ເລນິນ ໄດ້ຂຽນກ່ຽວກັບໜ້າທີ່ຂອງພະເດັດການຊົນຊັ້ນກຳມາຊີບອັນມີຫລາຍຮູບ ຫລາຍສີ ແລະ ສັບສົນນັ້ນດັ່ງນີ້: "ພະເດັດການກຳມາຊີບແມ່ນການຕໍ່ສູ້ຢ່າງທໍລະຫົດ, ຢ່າງນອງເລືອດ ແລະບໍ່ນອງເລືອດ,ຢ່າງຮຸນແຮງ ແລະ ສັນຕິວິທີໃນດ້ານການທະຫານ ແລະ ເສດຖະກິດ, ແບບອົບ-ຮົມສັ່ງສອນ ແລະ ບໍລິຫານ, ຕ້ານກຳລັງແລະມູນເຊື້ອຂອງສັງຄົມເກົ່າ"[໑].

ພະເດັດການກຳມາຊີບ ແມ່ນປະຊາທິປະໄຕທີ່ລະດັບຄຸນນະພາບສູງ ກວ່າທຸກໆລັດໃນອະດີດ. ມັນແມ່ນປະຊາທິປະໄຕຂອງ ປະຊາຊົນສ່ວນຫລວງຫລາຍທີ່ແນໃສ່ເພື່ອຕ້ານພວກກົດຂີ່ຂູດຮີດທີ່ເປັນຄົນສ່ວນໜ້ອຍ. ຈຸດປະສົງຂອງ ປະຊາທິປະໄຕນີ້ ແມ່ນເພື່ອດູດດຶງເອົາຊາວຜູ້ອອກແຮງງານເຂົ້າຮ່ວມໃນຂະບວນການກໍ່ສ້າງສັງຄົມນິຍົມ ແລະ ຄຸ້ມຄອງສັງຄົມ ແລະ ລັດ. ໃນນັ້ນບົດບາດນຳ

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ. ເຫລັ້ມທີ ໔໑, ໜ້າ ໔໗.

ພາຂອງຊົນຊັ້ນກຳມະກອນ ແລະ ພັກກອມມູນິດໃນລະບົບການຄຸ້ມຄອງ ການເມືອງ ແລະ ສັງຄົມຍັງຮັກສາໄວ້ຢ່າງເຕັມສ່ວນ. ຈຸດພິເສດຂອງປະຊາທິປະໄຕດັ່ງກ່າວນີ້ ຄືມັນບໍ່ພຽງແຕ່ປະກາດສິດທິຂອງຊາວຜູ້ອອກແຮງງານເທົ່ານັ້ນ, ແຕ່ຍັງປະຕິບັດສິດທິດັ່ງກ່າວເຂົ້າໃນວຽກງານຕົວຈິງ.

ຜະເດັດການຂອງຊົນຊັ້ນກຳມາຊີບ ສາມາດສະແດງອອກໃນຮູບແບບຕ່າງ ຕ່າງ ທີ່ຂຶ້ນກັບບັນດາຈຸດພິເສດຂອງການຂະຫຍາຍຕົວດ້ານປະຫວັດສາດໃນປະເທດຂຶ້ນກັບການຊົ່ງຊາກຳລັງລະຫວ່າງບັນດາຊົນຊັ້ນ ແລະ ລະດັບຄວາມຮ້າຍແຮງຂອງການປະທະກັນລະຫວ່າງບັນດາຊົນຊັ້ນດັ່ງກ່າວ. ວ.ອີ.ເລນິນ ໄດ້ຊີ້ແຈງວ່າທຸກໆປະຊາຊາດລ້ວນແຕ່ກ້າວໄປສູ່ສັງຄົມນິຍົມ. ແຕ່ເຖິງຈະມີ ຄວາມແຕກຕ່າງກັນໃນການເສີມຂະຫຍາຍສິດປະຊາທິປະໄຕ ແລະ ຮູບແບບ ການເມືອງກໍ່ຕາມ, ແຕ່ທາດແທ້ກໍ່ແມ່ນອັນດຽວກັນຄືຜະເດັດການກຳມາຊີບ. ຮູບແບບຂອງຜະເດັດການກຳມາຊີບ ອາດຈະແຕກຕ່າງກັນໃນດ້ານສະຖາບັນແລະອົງການຈັດຕັ້ງການເມືອງ ທີ່ປະຕິບັດພັນທະພາບລະຫວ່າງຊົນຊັ້ນ ກຳມະກອນກັບມະຫາຊົນຊາວຜູ້ອອກແຮງງານ ໄຮ້ກຳມາຊີບ. ຕາມທີ່ຮັບຮູ້ ກັນມາ ແລ້ວນັ້ນ ມີສອງຮູບແບບຂອງຜະເດັດການກຳມາຊີບ ຄືບັນດາສະພາໂຊວຽດ ແລະ ປະຊາທິປະໄຕປະຊາຊົນ.

ການຕໍ່ສູ້ປະຕິວັດຂອງຊົນຊັ້ນກຳມະກອນລັດເຊຍ ໄດ້ໃຫ້ກຳເນີດ ຮູບແບບຜະເດັດການກຳມາຊີບ ຄືບັນດາສະພາໂຊວຽດຂອງຜູ້ແທນກຳມະກອນຊາວນາທະຫານ ທີ່ໄດ້ຮັບການຢັ້ງຢືນໃນໂຊວຽດລັດເຊຍ ໃນປີ ໑໙໑໗. ສະພາ ໂຊວຽດມີຈຸດພິເສດຄືການປະສານສົມທົບລັກສະນະຂອງອົງການລັດ ແລະຂອງອົງການຈັດຕັ້ງມະຫາຊົນ. ສະພາໂຊວຽດຕາງຫນ້າໂດຍກົງໃຫ້ແກ່ພັນທະພາບຊົນຊັ້ນກຳມະກອນ-ຊາວນາ, ແມ່ນຮູບແບບການຈັດຕັ້ງທີ່ຮັດແຫນ້ນຄວາມເປັນເອກະພາບດ້ານການເມືອງ-ສັງຄົມ ແລະ ແນວຄິດຂອງປະຊາຊົນໂຊວຽດ. ສະພາໂຊວຽດໄດ້ສະແດງໃຫ້ເຫັນທາດແທ້ຂອງປະຊາທິປະໄຕສັງຄົມນິຍົມ ຄືການເລືອກຕັ້ງ, ການປ່ຽນແທນ, ລະບົບລາຍງານ, ລັກສະນະເປີດເຜີຍ, ການທີ່ຊາວຜູ້ອອກແຮງງານປະກອບສ່ວນຢ່າງກວ້າງຂວາງທີ່ສຸດ ເຂົ້າໃນການ ຄຸ້ມຄອງວຽກງານຂອງສັງຄົມ. ສະພາໂຊວຽດແມ່ນອົງການນິຕິບັນຍັດແລະບໍລິຫານພ້ອມກັນ, ພື້ນຖານແຫ່ງການກໍ່ສ້າງສະພາໂຊວຽດ ແມ່ນຫລັກການລວມສູນປະ

ຊາທິປະໄຕ. ລັກສະນະພິເສດຂອງຮູບແບບໂຊວຽດ ຂອງພະເດັດການກຳມາຊີບນັ້ນ ແມ່ນລັກສະນະມີພັກດຽວ. ພັກການເມືອງພຽງພັກດຽວຢູ່ ສ.ສ.ສ.ຊ. ທີ່ມີອິດທິພົນຮອບດ້ານໃນໝູ່ຊາວຜູ້ອອກແຮງງານ ແລະ ແມ່ນຕົວແທນ ໃຫ້ແກ່ຜົນປະໂຫຍດພື້ນຖານຂອງພວກເຂົາເຈົ້ານັ້ນ ແມ່ນ ພ.ກ.ສ.ຊ.

ຮູບແບບຂອງພະເດັດການຊົນຊັ້ນກຳມາຊີບອີກຮູບແບບໜຶ່ງ ຄືປະຊາທິປະໄຕ-ປະຊາຊົນ ທີ່ມີຈຸດພິເສດຂອງຕົນເອງ. ພາຍໃຕ້ລະບອບປະຊາທິປະໄຕ-ປະຊາຊົນ ມີຫລາຍພັກ, ໝາຍຄວາມວ່າ ມີຫລາຍພັກທີ່ຢືນຢູ່ໃນທັດສະນະ ກໍ່ສ້າງສັງຄົມນິຍົມ ແລະ ຮັບຮູ້ບົດບາດນຳພາຂອງພັກກອມມູນິດ. ໃນບາງ ປະເທດສັງຄົມນິຍົມ ມີແນວໂຮມປະຊາຊົນ, ເຊິ່ງແມ່ນອົງການຈັດຕັ້ງມະຫາຊົນທີ່ເຕົ້າໂຮມເອົາຊາວຜູ້ອອກແຮງງານໃນປະເທດ ເພື່ອຜົນປະໂຫຍດຂອງການກໍ່ສ້າງສັງຄົມນິຍົມ ພາຍໃຕ້ບົດບາດນຳພາຂອງຊົນຊັ້ນກຳມະກອນແລະພັກ ຂອງຊົນຊັ້ນດັ່ງກ່າວ.

ການສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເຊິ່ງເປັນລັດປະຊາທິປະໄຕທີ່ແທ້ຈິງແບບໃໝ່ນັ້ນ ໄດ້ໄຂສັງກາດໃໝ່ ຄືສັງກາດແຫ່ງການຂ້າມຜ່ານຈາກລະບອບລ່າເມືອງຂຶ້ນແບບໃໝ່ຂຶ້ນສູ່ລະບອບປະຊາທິປະໄຕ-ປະຊາຊົນ, ຂຶ້ນສູ່ການກໍ່ສ້າງສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ.

### ນ. ຈຸດພິເສດຂອງລະບົບການເມືອງຂອງສັງຄົມນິຍົມ ທີ່ຂະຫຍາຍຕົວ ແລະ ທ່າຂະຫຍາຍຕົວ ຂອງມັນ

ພ້ອມກັບການກໍ່ສ້າງສັງຄົມສັງຄົມນິຍົມ ທີ່ຂະຫຍາຍຕົວໃຫ້ສຳເລັດຢູ່ ສ.ສ.ສ.ຊ. ໄດ້ເກີດມີລະບົບການເມືອງ ທີ່ສອດຄ່ອງກັບການປ່ຽນແປງທີ່ໄດ້ມີ ຂຶ້ນທ່າມກາງການຂະຫຍາຍຕົວດ້ານເສດຖະກິດ, ການເມືອງ ແລະ ຊີວິດຈິດໃຈຂອງສັງຄົມ. ລະບົບການເມືອງຂອງສັງຄົມສັງຄົມນິຍົມທີ່ຂະຫຍາຍຕົວ ແມ່ນການສັງລວມບັນດາອົງການຈັດຕັ້ງຂອງລັດ ແລະ ມະຫາຊົນທີ່ຮັບປະກັນ ການດັດແປງການພົວພັນດ້ານສັງຄົມ ໃນປະເທດພາຍໃຕ້ບົດບາດນຳພາຂອງ ພ.ກ.

ສ.ຊ. ອັນນີ້ແມ່ນປະເພດສູງທີ່ສຸດໃນຈຳນວນລະບົບການເມືອງຂອງສັງຄົມ. ລະບົບການເມືອງຂອງສັງຄົມ ສັງຄົມນິຍົມທີ່ຂະຫຍາຍຕົວ ສະແດງອອກ ໃຫ້ເຫັນຢູ່ບ່ອນວ່າ ລະດັບການຂະຫຍາຍຕົວໃນທຸກດ້ານຂອງຊີວິດສັງຄົມນັ້ນສູງ. ຄວາມສູກວອມດ້ານເສດຖະກິດຂອງສັງຄົມ ໄດ້ເພີ່ມທະວີຂຶ້ນຢ່າງ ຫລາຍ, ໄດ້ສ້າງຕັ້ງກຳລັງແຫ່ງການຜະລິດທີ່ເຂັ້ມແຂງແຮງກ້າ, ມີວິທະຍາສາດ ແລະວັດທະນະທຳທີ່ກ້າວຫນ້າ, ໂຄງປະກອບຈຸ້ນຈຸ້ນຂອງສັງຄົມ ມີການປ່ຽນແປງ ໃນດ້ານທາດແທ້, ໄດ້ເກີດມີຊຸມລຶມສັງຄົມ ແລະ ຊຸມລຶມສາກົນ ແບບໃຫມ່ ຄືປະຊາຊົນໂຊວຽດ, ລະດັບວັດທະນະທຳ ແລະ ການສຶກສາຂອງຊາວຜູ້ອອກແຮງງານກໍໄດ້ເຊີດຊູຂຶ້ນຢ່າງຫລວງຫລາຍ; ໄດ້ເປີດກວ້າງພື້ນຖານແຫ່ງປະຊາທິປະໄຕສັງຄົມນິຍົມ, ແລະ ການປະກອບສ່ວນຂອງຊາວຜູ້ອອກແຮງງານ ເຂົ້າໃນຊີວິດຂອງລັດ.

ບົດບາດດ້ານສັງຄົມຂອງລະບົບການເມືອງໃນສັງຄົມນິຍົມ ທີ່ຂະຫຍາຍຕົວສະແດງອອກໃນການນຳພາ ແລະ ຊຸ້ມຄອງການເຄື່ອນໄຫວແບບປະດິດ ສ້າງຂອງປະຊາຊົນໂຊວຽດ ໃນການຕໍ່ສູ້ເພື່ອໄຊຊະນະຂອງລັດທິກອມມູນິດນິຍົມ. ພາກສ່ວນພື້ນຖານຂອງລະບົບນີ້ ແມ່ນພັກກອມມູນິດ, ລັດສັງຄົມນິຍົມຂອງ ທົ່ວປວງຊົນ, ອົງການຈັດຕັ້ງມະຫາຊົນ (ກຳມະບານ, ຊາວຫນຸ່ມກົມໂຊໂມນສະຫະກອນລວມຫມູ່ ແລະ ອົງການຈັດຕັ້ງອື່ນໆ) ແລະ ຫມູ່ຄະນະອອກແຮງງານ

ແກ່ນສານຂອງລະບົບການເມືອງຂອງບັນດາອົງການຈັດຕັ້ງຂອງລັດມະຫາຊົນ, ກຳລັງນຳພາ ແລະ ຊີ້ນຳຂອງສັງຄົມ ໂຊວຽດນັ້ນ ແມ່ນພັກກອມມູນິດແຫ່ງສະຫະພາບໂຊວຽດ. ການເພີ່ມທະວີບົດບາດ ແລະ ຄວາມຫມາຍ ຂອງ ພ.ກ.ສ.ຊ. ເປັນຄືກົດເກນແຫ່ງການຂະຫຍາຍຕົວຂອງສັງຄົມໂຊວຽດ.ສາຍເຫດພາວະວິໄສຂອງຂະບວນວິວັດດັ່ງກ່າວນີ້ ແມ່ນຫນ້າທີ່ແຫ່ງການກໍ່ສ້າງກອມມູນິດນິຍົມ, ການຊຸ້ມຄອງບັນດາຂະບວນວິວັດທາງສັງຄົມໄດ້ມີການສັບສົນຂຶ້ນ; ການສຶກສາ ແລະ ລະດັບຄວາມຮູ້ຂອງຊາວຜູ້ອອກແຮງງານມີການເພີ່ມທະວີຂຶ້ນ; ບົດບາດຂອງປັດໄຈອັດຕະວິໄສໄດ້ເພີ່ມຂຶ້ນ; ການຮ່ວມມືກັນ ລະຫວ່າງບັນດາປະເທດໃນລະບົບສັງຄົມນິຍົມແຫ່ງໂລກ ແລະ ການຕໍ່ສູ້ເພື່ອສັນຕິ ພາບໄດ້ຮັບການເສີມຂະຫຍາຍ. ພ.ກ.ສ.ຊ. ປະກອບອາວຸດທາງດ້ານທິດສະດີມາກ-ເລນິນ. ພ.ກ.ສ.ຊ. ເປັນຜູ້ກຳນົດທິດທາງລວມແຫ່ງການຂະຫຍາຍ-

ຕົວຂອງສັງຄົມ, ກໍມີດນະໂຍບາຍການເມືອງພາຍໃນ ແລະ ພາຍນອກຂອງ ສ.ສ.ສ.ຊ. ນຳພາການເຄື່ອນໄຫວແບບປະດິດສ້າງ ທີ່ຍິ່ງໃຫຍ່ຂອງ ປະຊາຊົນໂຊວຽດ, ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນໂຊວຽດ ເພື່ອໄຊຊະນະຂອງລັດທິກອມມູນິດນິຍົມນັ້ນ ມີລັກສະນະມີແຜນການ ແລະ ມີວິທະຍາສາດ. ນະໂຍບາຍການເມືອງຂອງ ພ.ກ.ສ.ຊ. ໄດ້ສະແດງເຖິງຜົນປະໂຫຍດພື້ນຖານ - ຂອງປະຊາຊົນໂຊວຽດທັງປວງ.

ພ້ອມກັນກັບໄຊຊະນະຂອງສັງຄົມນິຍົມ ລັດຜະເດັດການກຳມາຊີບໄດ້ກາຍເປັນລັດສັງຄົມນິຍົມຂອງທົ່ວປວງຊົນ ກໍຄືອົງການຈັດຕັ້ງການເມືອງຂອງ ທົ່ວປວງຊົນ ພາຍໃຕ້ບົດບາດນຳພາຂອງຊົນຊັ້ນກຳມະກອນ ໂດຍແມ່ນພັກກອມມູນິດ ເປັນຜູ້ນຳພາ.

ລະຫວ່າງຜະເດັດການຊົນຊັ້ນກຳມາຊີບ ກັບລັດຂອງທົ່ວປວງຊົນ ມີຈຸດພິເສດລວມກັນ ແລະ ມີຄວາມແຕກຕ່າງກັນທີ່ເປັນທາດແທ້. ລັດທັງສອງ ນີ້ ລ້ວນແຕ່ແມ່ນລັດປະເພດດຽວກັນ ທີ່ມີຮູບການແຕກຕ່າງກັນ ຄືລັດສັງຄົມນິຍົມທີ່ຢູ່ໃນລະດັບການຂະຫຍາຍຕົວທາງສັງຄົມແຕກຕ່າງກັນ. ອັນລວມລະຫວ່າງລັດທັງສອງນີ້ຢູ່ບ່ອນວ່າ ພື້ນຖານເສດຖະກິດແມ່ນກຳມະສິດລວມໝູ່ກ່ຽວກັບພາຫະນະການຜະລິດ; ລັດທັງສອງລ້ວນແຕ່ແມ່ນອົງການຈັດຕັ້ງການເມືອງຂອງ ບັນດາຊົນຊັ້ນທີ່ອອກແຮງງານ; ບົດບາດນຳພາຂອງຊົນຊັ້ນກຳມະກອນ ແລະ ພ.ກ.ສ.ຊ. ຖືກຮັກສາໄວ້ ແລະ ເຕີບໃຫຍ່ຂະຫຍາຍຕົວ; ປະຕິບັດການດູດດຶງດ້ວຍທຸກວິທີ ເອົາຊາວຜູ້ອອກແຮງງານເຂົ້າຮ່ວມໃນການຄຸ້ມຄອງວຽກງານ - ຂອງສັງຄົມ ແລະ ຂອງລັດ. ຄວາມແຕກຕ່າງກັນທີ່ເປັນທາດແທ້ລະຫວ່າງລັດສອງປະເພດນີ້ ກ່ອນອື່ນໝົດໄດ້ສະແດງອອກຢູ່ບ່ອນທີ່ ລັດຂອງທົ່ວປວງຊົນໄດ້ຍຸດຕິການປະຕິບັດໜ້າທີ່ປາບປາມບັນດາຊົນຊັ້ນກົດຂີ່ຂູດຮີດ ເນື່ອງຈາກ ວ່າການລົບລ້າງບັນດາຊົນຊັ້ນດັ່ງກ່າວໄດ້ປັດເປົ່າຄວາມຈຳເປັນຂອງໜ້າທີ່ ດັ່ງກ່າວນີ້. ມາດຕາການອັນຈຳເປັນໃນການປະຕິບັດລະບຽບວິໄນຍັງນຳໃຊ້ຢູ່ ຕໍ່ໄປ ສຳລັບຜູ້ຄົນທີ່ລະເມີດກົດໝາຍ, ລະເມີດມາດຕະຖານ ແລະ ຫລັກການແຫ່ງການດຳເນີນຊີວິດລວມໝູ່ແບບສັງຄົມນິຍົມ. ລັດຂອງທົ່ວປວງຊົນເປັນຕົວແທນໃຫ້ແກ່ຜົນປະໂຫຍດ ແລະ ມານະຈິດ ບໍ່ພຽງແຕ່ຂອງຊົນຊັ້ນກຳມະ ກອນເທົ່ານັ້ນ ແຕ່ຍັງແມ່ນຂອງປະຊາຊົນທັງປວງອີກດ້ວຍ. ສິດປະຊາທິປະໄຕ ບໍ່

ພຽງແຕ່ປະຕິບັດຕໍ່ຊົນຊັ້ນກໍາມະກອນເທົ່ານັ້ນ, ຫາກແຕ່ຕໍ່ສະມາຊິກທຸກໆ ຄົນຂອງສັງຄົມ, ເພາະຕາມລັກສະນະແລ້ວ ມັນເປັນສິດປະຊາທິປະໄຕຂອງ ທົ່ວປວງຊົນ. ລັດຂອງທົ່ວປວງຊົນປະຕິບັດໜ້າທີ່ຊ່ວຍເຫລືອເຊິ່ງກັນ ແລະກັນແລະຮ່ວມມືກັນໃນຂອບເຂດລະບົບສັງຄົມນິຍົມແຫ່ງໂລກ.

ເປົ້າໝາຍອັນສູງສົ່ງຂອງລັດທົ່ວປວງຊົນຄືການກໍ່ສ້າງສັງຄົມກອມມູນິດນິ-ຍົມທີ່ບໍ່ມີຊົນຊັ້ນນັ້ນໃຫ້ສໍາເລັດຜົນ.

ລັດຖະທໍາມະນູນແຫ່ງ ສ.ສ.ສ.ຊ. ກໍານົດໜ້າທີ່ຕົ້ນຕໍຂອງລັດຄື: ກໍ່ສ້າງພື້ນຖານດ້ານວັດຖຸ-ເຕັກນິກ ຂອງກອມມູນິດນິຍົມ, ປັບປຸງການພົວພັນ ສັງຄົມແບບສັງຄົມນິຍົມໃຫ້ສົມບູນຍິ່ງ ແລະ ດັດສ້າງການພົວພັນດັ່ງກ່າວໃຫ້ກາຍເປັນແບບກອມມູນິດນິຍົມ, ອົບຮົມແລະກໍ່ສ້າງຄົນສັງຄົມກອມມູນິດນິຍົມ, ຍົກສູງລະດັບຊີວິດການເປັນຢູ່ດ້ານວັດຖຸ ແລະ ວັດທະນະທໍາຂອງຊາວຜູ້ອອກແຮງງານ, ຮັບປະກັນຄວາມສະຫງົບຂອງປະເທດ, ສົ່ງເສີມສັນຕິພາບ ແລະ ເສີມຂະ - ຫຍາຍການຮ່ວມມືລະຫວ່າງຊາດ. "ລັດໂຊວຽດ ແມ່ນອໍານາດການ ປົກຄອງໂດຍແມ່ນກະໂຕຊາວຜູ້ອອກແຮງງານໄດ້ສ້າງຕັ້ງຂຶ້ນ ແລະ ເປັນຜູ້ປະຕິບັດ,ທີ່ສະແດງເຖິງ ແລະ ປົກປັກຮັກສາຜົນປະໂຫຍດພື້ນຖານຂອງພວກເຂົາເຈົ້າ... ສະຫະພາບໂຊວຽດ ແມ່ນຮູບແບບທີ່ກ້າວໜ້າ ແລະ ມີປະສິດທິພາບຂອງການເຕົ້າໂຮມບັນດາປະຊາຊາດ ແລະ ຊົນຊາດໂຊວຽດເຂົ້າເປັນລັດ ສະເພາະຊົ່ວໄລຍະປະຫວັດສາດແຫ່ງການຂ້າມຜ່ານຈາກລັດສັງຄົມນິຍົມກ້າວຂຶ້ນສູ່ ການຄຸ້ມຄອງສັງຄົມດ້ວຍຕົນເອງແບບກອມມູນິດນິຍົມໄປແຕ່ລະກ້າວ"[໑].

ພື້ນຖານທາງສັງຄົມແຫ່ງ ສ.ສ.ສ.ຊ. ປະກອບດ້ວຍພັນທະພາບ ກໍາມະກອນ, ຊາວນາ ແລະ ປັນຍາຊົນ. ພື້ນຖານການເມືອງແຫ່ງ ສ.ສ.ສ.ຊ . ແມ່ນບັນດາສະພາໂຊວຽດຜູ້ແທນປະຊາຊົນ, ທີ່ປະກອບເປັນລະບົບເອກະພາບແຫ່ງອໍານາດການປົກຄອງລັດ. ມາດຕາ ໔ ຂອງລັດຖະທໍາມະນູນແຫ່ງ ສ.ສ. ສ.ຊ. ບົ່ງວ່າ: "ອໍານາດການປົກຄອງທັງໝົດຢູ່ ສ.ສ.ສ.ຊ. ລ້ວນ ແຕ່ແມ່ນຂອງປະຊາຊົນ. ປະຊາຊົນເປັນຜູ້ປະຕິບັດອໍານາດການປົກຄອງລັດ ໂດຍ

---

໑) "ວ່າດ້ວຍວັນຄົບຮອບ ໖໐ ປີແຫ່ງການສ້າງຕັ້ງສະຫະພາບສາທາລະນະ-ລັດສັງຄົມນິຍົມໂຊວຽດ". ມະຕິຂອງສູນກາງ ພ.ກ.ສ.ຊ. ໜັງສືພິມ "ປຣາວະດາ", ໒໑ ກຸມພາ, ປີ ໑໙໘໒.

ຜ່ານບັນດາສະພາໂຊວຽດຜູ້ແທນປະຊາຊົນ ທີ່ປະກອບເປັນພື້ນຖານການເມືອງຂອງ ສ.ສ.ສ.ຊ. " ບັນດາສະພາໂຊວຽດຜູ້ແທນປະຊາຊົນ ນຳພາທຸກຂົງເຂດແຫ່ງການກໍ່ສ້າງລັດ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ. ບັນດາສະພາຮັບຮອງເອົາມະຕິຕ່າງໆ, ຮັບປະກັນການປະຕິບັດມະຕິດັ່ງກ່າວ, ກວດກາການປະຕິບັດມະຕິດັ່ງກ່າວ. ຕາມທາດແທ້ແລ້ວ ບັນດາສະພາໂຊວຽດ ບໍ່ພຽງແຕ່ແມ່ນອົງການຈັດຕັ້ງລັດເທົ່ານັ້ນ, ແຕ່ຍັງແມ່ນອົງການຈັດຕັ້ງມະຫາຊົນ. ອົງຕາມປະຊາທິປະໄຕສັງຄົມນິຍົມທີ່ໄດ້ຮັບການເສີມຂະຫຍາຍແລະອົງຕາມສັງຄົມ ທີ່ມີການຂະຫຍາຍຕົວກ້າວໜ້າ, ບັນດາສະພາໂຊວຽດຈະກາຍເປັນອົງການຈັດຕັ້ງຂອງມະຫາຊົນຫລາຍກວ່າ.

ບົນເສັ້ນທາງກ້າວຂຶ້ນກອມມູນິດນິຍົມ, ບັນດາອົງການປົກຄອງລັດ ຈະສູນເສຍລັກສະນະຊົນຊັ້ນດ້ານການເມືອງຂອງຕົນແຕ່ລະກ້າວ. ໄຊຊະນະ ຂອງກອມມູນິດນິຍົມໃນຂອບເຂດທົ່ວໂລກ ຫລືໃນປະເທດສ່ວນຫລາຍ ເປັນການກະກຽມປະຖົມປັດໄຈໃຫ້ແກ່ການທີ່ລັດຂອງທົ່ວປວງຊົນຈະສູນຫາຍໄປ ແລະ ກ້າວຂຶ້ນເປັນການປົກຄອງສັງຄົມດ້ວຍຕົນເອງ ແບບກອມມູນິດນິຍົມ ຄືອົງການ ຈຸ້ມຄອງວຽກງານສັງຄົມ ທີ່ບໍ່ມີລັດ ແລະ ບໍ່ມີລັກສະນະການເມືອງ.

ຫາກແຕ່ການທີ່ລັດຈະສູນຫາຍໄປນັ້ນ ແມ່ນຂະບວນວິວັດທີ່ດຳເນີນໄປເທື່ອລະກ້າວ ແລະ ຍາວນານ, ດຳເນີນໄປບົນພື້ນຖານແຫ່ງການຂະຫຍາຍ ຕົວຂອງກຳລັງແຫ່ງການຜະລິດ, ບົນພື້ນຖານການພົວພັນທາງສັງຄົມ, ປະຊາທິປະໄຕ ແລະ ວັດທະນະທຳຂອງປະຊາຊົນນັ້ນຢ່າງຮອບດ້ານ. ວ.ອີ. ເລນິນໄດ້ໃຫ້ຂໍ້ສັງເກດການວ່າ: ລັດອາດຈະສູນຫາຍໄປໄດ້ຢ່າງເຕັມສ່ວນກໍ່ຕໍ່ ເມື່ອສັງຄົມປະຕິບັດຫລັກການ "ເຮັດຕາມຄວາມສາມາດ ຊົມໃຊ້ຕາມຄວາມ ຕ້ອງການ", ໝາຍຄວາມວ່າ, ໃນເມື່ອຄົນເຮົາຫາກຊິນເຄີຍຕໍ່ການປະຕິບັດຫລັກການພື້ນຖານແຫ່ງການດຳລົງຊີວິດຮ່ວມກັນ ແລະ ເມື່ອໃດແຮງງານມີ ສະມັດຖະພາບສູງຈົນເຖິງຂັ້ນວ່າຄົນອອກແຮງງານດ້ວຍຄວາມສະໝັກໃຈຕາມຄວາມສາມາດຂອງຕົນ" ໑).

ຈຸດພິເສດທີ່ສຳຄັນ ຂອງລະບົບການເມືອງໃນສັງຄົມນິຍົມຂະຫຍາຍຕົວນັ້ນ

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ, ເຫລັ້ມທີ ໓໓, ໜ້າ ໙໖.

ແມ່ນການປັບປຸງປະຊາທິປະໄຕ–ສັງຄົມນິຍົມໃຫ້ດີຂຶ້ນເປັນປະຈຳ. "ໂດຍແຕກຕ່າງກັບປະຊາທິປະໄຕນາຍທຶນ ທີ່ພຽງແຕ່ປະກາດສິດສະເຫມີພາບ ລະຫວ່າງບັນດາປະຊາຊາດໃນຮູບນອກເທົ່ານັ້ນ, ປະຊາທິປະໄຕສັງຄົມນິຍົມປົກປັກ ຮັກສາຜົນປະໂຫຍດທາງສັງຄົມ ແລະ ຊົນຊາດ ແລະ ສິດທິຂອງຊາວຜູ້ອອກແຮງງານມີການຮັບປະກັນ. ມັນ ສ້າງຄວາມອາດສາມາດຕົວຈິງໃຫ້ແຕ່ລະຄົນ ໄດ້ເຂົ້າຮ່ວມໃນວຽກງານຂອງລັດ ແລະ ສັງຄົມນັບມື້ນັບກວ້າງຂວາງແລະ ໂດຍກົງ. ອັນນີ້ແມ່ນທິດທາງຕົ້ນຕໍຂອງການເສີມຂະຫຍາຍລະບົບການເມືອງ ຂອງໂຊວຽດໃນຂັ້ນຕໍ່ໄປ" ໑).

ປະຊາທິປະໄຕສັງຄົມນິຍົມ ໄດ້ຮັບການປັບປຸງໃຫ້ສົມບູນຂຶ້ນແລະຂະຫຍາຍຕົວຢ່າງເປັນປະຈຳ. ຂະບວນວິວັດດັ່ງກ່າວໄດ້ສະແດງອອກໃນການ ເສີມຂະຫຍາຍບົດບາດຂອງບັນດາອົງການຈັດຕັ້ງມະຫາຊົນຂອງຊາວຜູ້ອອກແຮງ ງານ ເຊັ່ນກຳມະບານ, ຊາວຫນຸ່ມກົມໂຊໂມນ, ສະຫະກອນລວມຫມູ່, ສະຫະພັນສິລະປິນ, ຫນ້າທີ່ຂອງບັນດາອົງການຈັດຕັ້ງດັ່ງກ່າວໃນການແກ້ໄຂບັນຫາລັດ ທີ່ສຳຄັນນັ້ນ ຈະໄດ້ຮັບການເສີມຂະຫຍາຍໃນຂັ້ນຕໍ່ໄປ.

ຄວາມເປັນເອກະພາບຂອງປະຊາຊົນໂຊວຽດອັນນັບມື້ນັບແຫນ້ນແກ່ນ ຂຶ້ນນັ້ນ ສະແດງອອກໃນການທີ່ພູກງຊົນຊັ້ນ ແລະ ປັນຍາຊົນໃນສັງຄົມໂຊວຽດ – ລ້ວນແຕ່ເຂົ້າຮ່ວມໃນຂະບວນການກຳມະບານ. "ສະຫະພັນກຳມະບານ ມີຖານະບົດບາດອັນສຳຄັນໃນລະບົບການເມືອງຂອງສັງຄົມ ສັງຄົມນິຍົມ. ກຳມະບານແມ່ນພາຫະນະທີ່ເຂັ້ມແຂງແຮງກ້າແຫ່ງການເສີມຂະຫຍາຍປະຊາທິປະໄຕດູດດຶງເອົາຊາວຜູ້ອອກແຮງງານເຂົ້າຮ່ວມໃນການກໍ່ສ້າງກອມມູນິດນິຍົມ"໒).

ເປີດກວ້າງສິດທິຂອງກຳມະບານ, ອິດທິພົນ ແລະ ການພົວພັນກັບມະຫາຊົນດ້ວຍພູກວິທີທາງນັ້ນ ແມ່ນທິດທາງທີ່ສຳຄັນ ເພື່ອເສີມຂະຫຍາຍປະຊາທິປະ

---

໑) "ວ່າດ້ວຍວັນຄົບຮອບ ໖໐ ປີແຫ່ງການສ້າງຕັ້ງສະຫະພາບສາທາ ລະນະລັດສັງຄົມນິຍົມໂຊວຽດ". ມະຕິຂອງສູນກາງ ພ.ກ.ສ.ຊ. ຫນັງສືພິມ "ປຣາວະດາ", ໒໑ ກຸມພາ ປີ ໑໙໘໒.

໒) ລ.ອີ.ເບຼສເນັບ ຄຳປາໄສຕໍ່ກອງປະຊຸມໃຫຍ່ຄັ້ງທີ ໑໗ ສະຫະພັນກຳມະບານ ສ.ສ.ສ.ຊ. ຫນັງສືພິມ"ປຣາວະດາ",໑໗ ມີນາ,ປີ ໑໙໘໒.

ໄຕສັງຄົມ ນິຍົມ. ພັກກອມມູນິດຕໍ່ສູ້ຢ່າງເດັດດ່ຽວຕ້ານແນວຄິດປະຕິຮູບ ນາຍທຶນ ກ່ຽວກັບ "ຄວາມເປັນກາງ" ຂອງສະຫະພັນກຳມະບານ. ມີແຕ່ ຄວາມເປັນເອກະພາບລະຫວ່າງພັກ, ລັດ ແລະ ສະຫະພັນກຳມະບານ, ມີແຕ່ວຽກງານແບບເຂົ້າແກັບເຂົ້າເກຍ ແລະ ພ້ອມພຽງຮຽງໜ້າຂອງທຸກໆ ພາກສ່ວນດັ່ງກ່າວນີ້ເທົ່ານັ້ນ ທີ່ເປັນສິ່ງຊຸກຍູ້ການກໍ່ສ້າງສັງຄົມກອມມູນິດນິຍົມໃຫ້ສຳເລັດ, ຮັບປະກັນຄວາມກ້າວໜ້າໃຫ້ແກ່ຊີວິດການເປັນຢູ່ດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ.

ຄວາມໝາຍພິເສດໃນການເສີມຂະຫຍາຍປະຊາທິປະໄຕໄດ້ແກ່ໝູ່ຄະນະອອກແຮງງານ. ປະຊາທິປະໄຕຈະບໍ່ມີຄວາມໝາຍ ຖ້າຫາກມັນບໍ່ກອມ ລວມເອົາຂົງເຂດດຳເນີນກ່ານອອກແຮງງານປະຈຳວັນຂອງຄົນ.

ການຂ້າມຜ່ານຢ່າງເປັນລຳດັບຈາກລະບົບການເມືອງສັງຄົມນິຍົມກ້າວຂຶ້ນສູ່ການຄຸ້ມຄອງສັງຄົມດ້ວຍຕົນເອງແບບກອມມູນິດນິຍົມນັ້ນ ຂຶ້ນກັບການ ເສີມ-ຂະຫຍາຍປະຊາທິປະໄຕ ແລະ ຄວາມເປັນລັດສັງຄົມນິຍົມດ້ວຍທຸກວິທີທາງ , ດຶງດູດເອົາຊາວຜູ້ອອກແຮງງານທຸກຄົນເຂົ້າຮ່ວມໃນການຄຸ້ມຄອງວຽກ ງານຂອງສັງຄົມ. ຕ່ອງໃສ້ທີ່ຕັດສິນຊີ້ຂາດໃນຂະບວນວິວັດດັ່ງກ່າວນີ້ແມ່ນ ການເຄື່ອນໄຫວຈັດຕັ້ງ ແລະ ຊີ້ນຳຂອງພັກກອມມູນິດ.

# ພາກທີ ເຈັດ

## ສະຕິສັງຄົມ ແລະ ບົດບາດຂອງມັນໃນຊີວິດຂອງສັງຄົມ

ບັນຫາກ່ຽວກັບການພົວພັນກັນ ລະຫວ່າງສະຕິສັງຄົມ ແລະ ການດຳລົງຄົງຕົວສັງຄົມແມ່ນບັນຫາພື້ນຖານຂອງປັດຊະຍາສະເພາະສັງຄົມ. ອັນນີ້ ມັນແມ່ນບັນຫາພື້ນຖານຂອງລັດທິວັດຖຸນິຍົມປະຫວັດວິພາກ. ການໄຈ້ແຍກເນື້ອໃນຂອງສະຕິສັງຄົມ ແລະ ບົດບາດຂອງມັນໃນຊີວິດຂອງສັງຄົມ ມີຄວາມ ໝາຍສຳຄັນສຳລັບທິດສະດີ ແລະ ພຶດຕິກຳຕົວຈິງແຫ່ງການດັດສ້າງໂລກບົນພື້ນຖານກອມມູນິດນິຍົມ, ກໍ່ສ້າງຄົນໃໝ່ ແລະ ເພື່ອຕໍ່ສູ້ຕ້ານລະບົບແນວຄິດຂອງນາຍທຶນ.

### ໑. ຄວາມຮູ້ກ່ຽວກັບສະຕິສັງຄົມແລະໂຄງປະກອບຂອງມັນ

ເວົ້າແບບລວມໆແລ້ວ ສະຕິສັງຄົມອາດຈະນິຍາມວ່າ ເປັນຄືການ ທີ່ຄົນສ່ອງແສງການດຳລົງຄົງຕົວສັງຄົມຂອງຄົນ. ຄົນສ່ອງແສງການດຳລົງຄົງ ຕົວສັງຄົມໃນຄວາມຮູ້ສຶກ, ອາລົມ, ແນວຄິດ, ທິດສະດີຂອງຕົນ, ແລະ ຈິນກະທັງໃນຄວາມຫລົງຜິດຄືຄວາມໄຝ່ຝັນ. ເຊັ່ນຕົວຢ່າງສາສະໜາ, ຄວາມເຊື່ອຖືວ່າມີຜີແລະ ຜີຮ້າຍ, ມີເທວະດາ ແລະ ຍັກນັ້ນກໍ່ແມ່ນຕອນໜຶ່ງຂອງສະຕິ ແຕ່ມັນແມ່ນສະຕິທີ່ຖືກບິດເບືອນ. ອັນນີ້ແມ່ນຄົນເຂົ້າໃຈຜິດຕໍ່ປະກົດການນີ້ ຫລືປະກົດການນັ້ນຂອງຄວາມເປັນຈິງ. ຄວາມຫລົງຜິດທຸກປະການເຫຼົ່ານີ້ ລ້ວນແຕ່ແມ່ນການສ່ອງແສງເຖິງການດຳລົງຄົງຕົວ, ແຕ່ແມ່ນການສ່ອງແສງທີ່ບໍ່ມີວິທະຍາສາດ ແລະ ຜິດພາດ.

ດັ່ງທີ່ໄດ້ຊີ້ແຈງອອກໃນພາກທີ່ຜ່ານມາແລ້ວ ບັນຫາພື້ນຖານຂອງປັດຊະຍາ ມີສອງດ້ານ. ອັນນີ້ມັນແມ່ນບັນຫາວັດຖຸມີມາກ່ອນ ແລະ ສະຕິມີມາທີຫລັງແລະ ບັນຫາກ່ຽວກັບຄວາມສາມາດຮັບຮູ້ໂລກ. ຕອບບັນຫາພື້ນຖານຂອງປັດຊະຍາ-ໃນດ້ານທີຫນຶ່ງ, ລັດທິວັດຖຸນິຍົມປະຫວັດວິພາກ ເລີ່ມຈາກກົກເຫງົ້າທີ່ວ່າ,ອັນຕັດສິນຊີ້ຂາດໃນການພົວພັນກັນລະຫວ່າງສະຕິສັງຄົມ ແລະ ການດຳລົງຄົງຕົວສັງຄົມແມ່ນການດຳລົງຄົງຕົວສັງຄົມ. ກ.ມາກ ໄດ້ຂຽນວ່າ: "ບໍ່ແມ່ນ ສະຕິຂອງຄົນເປັນສິ່ງກຳນົດການດຳລົງຄົງຕົວຂອງຄົນ, ແຕ່ກົງກັນຂ້າມ,ແມ່ນການດຳລົງຄົງຕົວສັງຄົມຂອງຄົນເປັນສິ່ງກຳນົດສະຕິຂອງຄົນ" ໑). ເງື່ອນໄຂ ຊີວິດການເປັນຢູ່ຂອງຄົນ, ຖານະຂອງຄົນໃນສັງຄົມເປັນແນວໃດແລ້ວ, ຄວາມຮູ້ສຶກ ແລະ ແນວຄິດຂອງຄົນ, ສະຕິຂອງຄົນກໍ່ຈະເປັນເຊັ່ນດຽວກັນ. ວ.ອີ. ເລນິນ ໄດ້ຂຽນວ່າ,"ເງື່ອນໄຂຊີວິດການເປັນຢູ່, ລະບົບການພົວພັນ ແຫ່ງການຜະລິດທີ່ກ່ຽວຂ້ອງນັ້ນໄດ້ສ້າງຄວາມຮູ້ສຶກ ແລະ ແນວຄິດຂອງຄົນ ຂຶ້ນ-ມາ" ໒). ໃນຄວາມເວົ້າຂອງບັນດາຜູ້ສ້າງຕັ້ງລັດທິມາກດັ່ງກ່າວນີ້ ໄດ້ສະແດງເຖິງທາດແທ້ພື້ນຖານຂອງກົດເກນວ່າດ້ວຍບົດບາດຕັດສິນຊີ້ຂາດຂອງການດຳລົງຄົງຕົວສັງຄົມຕໍ່ສະຕິສັງຄົມ.

ລັດທິວັດຖຸນິຍົມປະຫວັດວິພາກ ແກ້ໄຂບັນຫາພື້ນຖານຂອງປັດຊະຍາ ແບບວັດຖຸນິຍົມທັງໃນດ້ານທີສອງອີກພ້ອມ. ມັນຊີ້ແຈງໃຫ້ເຫັນວ່າ ສະຕິສັງຄົມ ມີຄວາມສາມາດຮັບຮູ້ການດຳລົງຄົງຕົວສັງຄົມ, ສ່ອງແສງມັນຢ່າງຖືກຕ້ອງ.ວ.ອີ.ເລນິນ ໄດ້ຂຽນໃນ ບົດນິພົນເລື່ອງ "ສາມບໍ່ເກີດ ແລະ ສາມພາກສ່ວນປະກອບຂອງລັດທິມາກ" ວ່າ "ເຊັ່ນດຽວກັນ ການຮັບຮູ້ຂອງຄົນ ສ່ອງແສງເຖິງທຳມະຊາດທີ່ຄົງຢູ່ຢ່າງບໍ່ຂຶ້ນກັບຄົນ ຫມາຍຄວາມວ່າ ສ່ອງແສງເຖິງວັດຖຸທີ່ພວມຂະຫຍາຍຕົວນັ້ນ, ການຮັບຮູ້ສັງຄົມ ຂອງຄົນ (ຫມາຍຄວາມວ່າທັດສະນະແລະທິດສະດີຕ່າງໆດ້ານປັດຊະຍາ, ສາສະຫນາການເມືອງແລະອື່ນໆ) ກໍສ່ອງແສງເຖິງລະບອບເສດຖະກິດຂອງສັງຄົມ" ໓).

---

໑) ກ.ມາກ ແລະ ຟ.ອັງແກນ.ບົດນິພົນ,ເຫລັ້ມ ໑໓, ຫນ້າ ໗.

໒) ວ.ອີ.ເລນິນ ບົດນິພົນຄົບຊຸດ. ເຫລັ້ມ ໑, ຫນ້າ ໔໒໗.

໓) ວ.ອີ.ເລນິນ ບົດນິພົນຄົບຊຸດ. ເຫລັ້ມ ໒໓, ຫນ້າ ໔໔.

ເມື່ອສ່ອງແສງເຖິງການດຳລົງຄົງຕົວສັງຄົມແລ້ວ, ສະຕິສັງຄົມ ກ່ອນອື່ນຫມົດສະແດງເຖິງຜົນປະໂຫຍດ ແລະ ຄວາມຕ້ອງການຂອງຄົນ. ທຸກສິ່ງ ທຸກຢ່າງທີ່ຄົນເປັນຜູ້ເຮັດນັ້ນ ລ້ວນແຕ່ເຮັດເພື່ອຕອບສະຫນອງຄວາມຮຽກຮ້ອງ - ຕ້ອງການ ແລະ ຜົນປະໂຫຍດຂອງຕົນ. ເນື່ອງຈາກວ່າ ໃນສັງຄົມທີ່ມີຊົນຊັ້ນ ຜົນປະໂຫຍດ ແລະ ຄວາມຮຽກຮ້ອງຕ້ອງການຂອງຄົນມີລັກສະນະຊົນຊັ້ນ, ສະນັ້ນ ສະຕິສັງຄົມຂອງສັງຄົມ ກໍ່ມີລັກສະນະຊົນຊັ້ນເຊັ່ນດຽວກັນ. ຖານະຕົວຈິງຂອງຊົນຊັ້ນນີ້ ຫລືຊົນຊັ້ນນັ້ນ ກຳນົດຄວາມຈຳເປັນຕ້ອງໄດ້ກໍ່ສ້າງຄວາມ ເຂົ້າໃຈ ແລະ ການຕີລາຄາຂອງຕົນຕໍ່ບັນດາປະກົດການສັງຄົມ. ບັນດາຜູ້ສ້າງຕັ້ງລັດທິມາກໄດ້ຊີ້ແຈງໃຫ້ເຫັນຢ່າງຫນັກແຫນ້ນວ່າ ແນວຄິດທີ່ຄອບຄອງໃນແຕ່ລະຍຸກສະໄຫມອັນແນ່ນອນ ແມ່ນແນວຄິດຂອງຊົນຊັ້ນປົກຄອງ. ການປ່ຽນ ແທນການປົກຄອງຂອງຊົນຊັ້ນຫນຶ່ງດ້ວຍຊົນຊັ້ນອື່ນນັ້ນ ໄດ້ນຳໄປເຖິງການຖ່າຍທອດປະເພດຂອງສະຕິໃນຍຸກສະໄຫມປະຫວັດສາດທີ່ແຕກຕ່າງກັນ. ແຕ່ລະຮູບຖານຈັດຕັ້ງເສດຖະກິດມີສະຕິສັງຄົມອັນເປັນແບບຂອງຕົນ, ບົນພື້ນຖານອັນນີ້ ພວກເຮົາສາມາດເວົ້າເຖິງສະຕິປະເພດປະຖົມບູຮານ, ຂ້າທາດ, ສັກດິນາ, ນາຍທຶນ ແລະ ກອມມູນິດນິຍົມ. ພ້ອມກັນນັ້ນ ໃນບັນດາຮູບຖານຈັດຕັ້ງສັງຄົມເສດຖະກິດ ທີ່ມີຄວາມເປັນປໍລະປັກກັນ, ເນື່ອງຈາກວ່າ ບັນດາຊົນຊັ້ນທີ່ ປະກອບເຂົ້າເປັນຮູບຖານຈັດຕັ້ງດັ່ງກ່າວນີ້ ມີຜົນປະໂຫຍດທີ່ກົງກັນຂ້າມກັນແລ້ວ ສະຕິຈິ່ງບໍ່ອາດຈະເປັນແບບອັນຫນຶ່ງອັນດຽວກັນ ແລະ ເອກະພາບກັນໄດ້. ຄວາມເປັນປໍລະປັກທາງຊົນຊັ້ນ ເວລາໃດກໍ່ສ່ອງແສງອອກໃນສະຕິຂອງບັນດາຊົນຊັ້ນທີ່ແຕກຕ່າງກັນ.

ມີແຕ່ເລີ່ມຈາກສັງຄົມນິຍົມ ທີ່ໄດ້ລົບລ້າງຄວາມເປັນປໍລະປັກທາງຊົນຊັ້ນ-ແລ້ວເທົ່ານັ້ນ, ຄວາມຂັດແຍ່ງແບບເປັນປໍລະປັກກັນດ້ານສະຕິລະຫວ່າງຊົນຊັ້ນຂອງຊາວຜູ້ອອກແຮງງານຈຶ່ງສູນຫາຍໄປເຊັ່ນກັນ. ຫາກແຕ່ອັນນີ້ມັນບໍ່ ຫມາຍເຖິງວ່າສະຕິສັງຄົມພາຍໃຕ້ສັງຄົມນິຍົມຈະບໍ່ມີລັກສະນະຊົນຊັ້ນ. ສະຕິ ສັງຄົມແບບສັງຄົມນິຍົມກໍ່ມີລັກສະນະຊົນຊັ້ນເຊັ່ນດຽວກັນ, ແຕ່ລັກສະນະຊົນຊັ້ນ ດັ່ງກ່າວນີ້ ແນໃສ່ເພື່ອຕໍ່ສູ້ຕ້ານລະບົບແນວຄິດຂອງນາຍທຶນ, ເພື່ອປົກປັກຮັກ ສາຫລັກມູນລັດທິມາກ-ເລນິນ, ເພື່ອລົບລ້າງຈິດຕະສາດແບບກຳມະສິດ ສ່ວນຕົວແບບນາຍທຶນນ້ອຍ, ເຊິ່ງໃນເງື່ອນໄຂສັງຄົມນິຍົມຍັງມີບາງຄົນຖືກຕິດແສດຢູ່.

ກ່ອນການກຳເນີດຂອງລັດທິມາກ, ທັດສະນະແບບຈິດຕະນິຍົມ ກ່ຽວກັບການຂະຫຍາຍຕົວຂອງສັງຄົມໄດ້ມີ ຖານະຄອບຄອງໃນປັດຊະຍາ. ກ. ມາກ ແລະ ຟ.ອັງແກນ ໄດ້ສ້າງພື້ນຖານຫລັກການວ່າດ້ວຍບັນຫາສະຕິຂອງຄົນປ່ຽນແປງບົນພື້ນຖານ "ຄວາມຮັກລວມທົ່ວໄປ" (ທີ່ນັກປັດຊະຍາໃນສະໄໝກ່ອນລັດທິມາກ ສ່ວນຫລວງຫລາຍພາກັນເຊື່ອຖືກັນມາ )ນັ້ນແມ່ນຄວາມໄຝ່ຝັນທີ່ບໍ່ມີວັນຈະປະກົດເປັນຈິງ. ຈົນກະທັ່ງວ່າ ຖ້າຫາກບໍ່ມີເງື່ອນໄຂພາວະວິໄສ ທີ່ເໝາະສົມແລ້ວ ຄົນກໍບໍ່ສາມາດຈະຮັບເອົາແນວຄິດທີ່ດີທີ່ສຸດໄດ້. ເພື່ອສ້າງເງື່ອນໄຂດັ່ງນີ້ ຕ້ອງ "ລົບລ້າງທຸກໆການພົວພັນ, ເຊິ່ງໃນນັ້ນຄົນຖືກ ຢຽດຫຍາມ, ຖືກບັງຄັບໃຫ້ເປັນຂ້າທາດ, ຖືກປະປ່ອຍໃຫ້ຂາດທີ່ເພິ່ງ ແລະ ຖືກໝິ່ນປະໝາດ...".[໑] ໃນຂະນະດຽວກັນນັ້ນ ມີພຽງແຕ່ການຕໍ່ສູ້ໂດຍຜ່ານການປະຕິວັດສັງຄົມນິຍົມຂອງກະໂຕມະຫາຊົນເອງເທົ່ານັ້ນ ຈຶ່ງສາມາດ ບັນລຸຈຸດປະສົງດັ່ງກ່າວນີ້ໄດ້. ກ.ມາກ ແລະ ຟ.ອັງແກນ ໄດ້ຂຽນວ່າ ເພື່ອ ໃຫ້ສະຕິກອມມູນິດນິຍົມກຳເນີດຂຶ້ນໃນມວນມະຫາຊົນ "ຈຳຕ້ອງມີການ ປ່ຽນແປງຂອງຄົນຢ່າງຫລວງຫລາຍ ທີ່ອາດເປັນໄປໄດ້ພຽງແຕ່ໃນຂະບວນການ ຕົວຈິງເທົ່ານັ້ນ..."(໒)

ສະຕິສັງຄົມມີໂຄງປະກອບທີ່ສັບສົນ. ໂຄງປະກອບນີ້ຖືກກຳນົດດ້ວຍລັກສະນະຫລາຍດ້ານຂອງກະໂຕສະຕິສັງຄົມ ກໍຄືລັກສະນະສັບສົນຂອງຂະບວນ ວິວັດແຫ່ງການສ່ອງແສງ ແລະ ຮັບຮູ້. ໃນສະຕິສັງຄົມມີການໄຈ້ແຍກລະດັບ, ອົງເຂດ ແລະ ຮູບແບບ. ນອກຈາກນັ້ນ ຍັງໄດ້ໄຈ້ແຍກສະຕິສັງຄົມ ແລະ ສະຕິບຸກຄົນ.

ສະຕິສັງຄົມແບ່ງອອກເປັນສະຕິແບບທຳມະດາ ແລະ ແບບທິດສະດີ.ການຮັບຮູ້ໂລກໃນລະດັບສະຕິແບບທຳມະດາ ມີລັກສະນະບໍ່ເລິກເຊິ່ງ, ການ ໄຈ້ແຍກປະເພດຂອງປະກົດການດຳເນີນຕາມລັກສະນະຮູບນອກ, ການຕີ ລາຄາບັນດາປະກົດການດັ່ງກ່າວກໍອີງຕາມທັດສະນະຂອງຄວາມຮຽກຮ້ອງ ຕ້ອງການປະຈຳວັນ. ຄຽງຄູ່ກັນກັບບັນດາທັດສະນະທີ່ສ່ອງແສງເຖິງຊີວິດປະຈຳວັນແບບ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ,ເຫລັ້ມ ໑, ໜ້າ ໔໒໒.

໒. ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ໓, ໜ້າ ໗໐.

ທັນສະໄໝແລ້ວ, ໃນສະຕິແບບທຳມະດາຍັງປະກອບມີການສັນນິຖານ ແລະ ການອາດພາບກ່ຽວກັບຊີວິດຄວາມເປັນຢູ່ທີ່ສືບທອດມາຈາກອະດີດ. ໃນສະຕິ-ແບບທຳມະດາ ມັກຈະມີສ່ວນໃດສ່ວນໜຶ່ງຂອງສະຕິປັນຍາຂອງປະຊາຊົນ,ຮັກສາເລື່ອງຕຳນານ, ບົດເພງ, ນິທານພື້ນເມືອງ. ໃນຄວາມໝາຍນີ້ ສະຕິແບບທຳມະດາອາດຈະຖືເປັນສະຕິແບບມູນເຊື້ອພື້ນເມືອງ.

ສະຕິແບບທຳມະດາແຍກອອກເປັນທັດສະນະບົດຮຽນນິຍົມ ແລະ ຈິດຕະ-ສາດສັງຄົມ. ບັນດາທັດສະນະບົດຮຽນນິຍົມ ໄດ້ກວມລວມເອົາຄວາມຮູ້ ພື້ນຖານຂອງຄົນກ່ຽວກັບທຳມະຊາດ, ການເຄື່ອນໄຫວອອກແຮງງານໃນການປົວແປງດິນປູກຝັງ, ຜະລິດເຄື່ອງມືອອກແຮງງານແບບງ່າຍດາຍ (ທີ່ບໍ່ຮຽກຮ້ອງໃຫ້ມີຄວາມຮູ້ວິທະຍາສາດ ) ແລະ ອື່ນໆ. ຄວາມຮູ້ແບບບົດຮຽນນິຍົມນີ້ ຍັງໄດ້ກວມລວມເອົາຄວາມເຂົ້າໃຈແບບທຳມະດາຂອງຄົນກ່ຽວກັບປະກົດການສັງຄົມທີ່ມີຫລາຍຮູບຫລາຍແບບ, ຕົວຢ່າງເຊັ່ນ ກຳມະສິດ, ຊົນຊັ້ນ, ລັດ,ການຕີລາຄາຕໍ່ ເຫດການຕ່າງໆຂອງຕົນ. ແຕ່ຄວາມຮູ້ດັ່ງກ່າວນີ້ ແມ່ນຄວາມ ຮູ້ແບບຜິວເຜີນທີ່ບໍ່ໄດ້ແຍກເຖິງທາດແທ້ອັນເລິກເຊິ່ງຂອງບັນດາປະກົດການ ສັງຄົມ, ເຊັ່ນ ສາຍເຫດທີ່ພາໃຫ້ເກີດມີກຳມະສິດສ່ວນຕົວ, ຊົນຊັ້ນ,ລັດ ແລະ ອື່ນໆ.

ຈິດຕະສາດສັງຄົມ ແມ່ນການສັງລວມຄວາມຮູ້ສຶກ, ອາລົມ, ຄວາມຄິດ ຄວາມເຫັນ, ພ້ອມທັງຄວາມໄຝ່ຝັນ ແລະ ການຫລົງຜິດຂອງບັນດາ ກຸ່ມຄົນ (ຊົນຊັ້ນ ) ໃນສັງຄົມໃນໄລຍະອັນແນ່ນອນແຫ່ງການຂະຫຍາຍຕົວຂອງ ສັງຄົມ. ໂດຍແຕກຕ່າງກັບຈິດຕະສາດຂອງບຸກຄົນແລ້ວ, ຈິດຕະສາດສັງຄົມແມ່ນປະກົດການທີ່ກວ້າງຂວາງ. ເຊັ່ນດຽວກັນກັບສະຕິສັງຄົມເວົ້າລວມແລ້ວ ມັນການສ່ອງແສງເຖິງການດຳລົງຄົງຕົວສັງຄົມຂອງຄົນ ແລະ ໃນສັງຄົມ ທີ່ມີຊົນຊັ້ນມີລັກສະນະຊົນຊັ້ນ. ກ.ມາກ ແລະ ຟ.ອັງແກນ ໄດ້ໄຈ້ແຍກຢ່າງຈະແຈ້ງບັນດາຈຸດພິເສດທາງດ້ານຈິດຕະສາດຂອງນາຍທຶນ ແລະ ຂອງກຳມາຊີບແລະລັກສະນະກົງກັນຂ້າມທີ່ບໍ່ປະນີປະນອມກັນໄດ້ລະຫວ່າງພວກມັນ. ກ.ມາກແລະ ຟ.ອັງແກນ ໄດ້ຊີ້ແຈງວ່າ ທຶນນິຍົມສົ່ງເສີມໃຫ້ຄົນເປັນຜູ້ໜ້າໄຫວ້ຫລັງຫລອກ ແລະ ໂຫດຮ້າຍ, ຄັບແຄບເອກະຊົນ, ເຫັນແຕ່ຜົນປະໂຫຍດ ແລະລາຍໄດ້ສ່ວນຕົວ, ຂາດສິນທຳ ແລະ ຍຶດຖືລັດທິຮັກສາຮີດເດີມໃນດ້ານການເມືອງ .

ໃນ "ຄຳຖະແຫລງການຂອງພັກກອມມູນິດ" ມີບາງຕອນກ່າວວ່າ: "ຢູ່ທຸກແຫ່ງຫົນທີ່ນາຍທຶນຍາດເອົາການປົກຄອງແລ້ວນັ້ນ ນາຍທຶນໄດ້ທັບມ້າງທຸກໆການພົວພັນແບບສັກດີນາ, ແບບເຈົ້າກົກເຈົ້າເຫລົ່າ ແລະ ແບບດີງາມຕາມຊົນນະບົດ ແລະ ບໍ່ປ່ອຍປະໃຫ້ມີສາຍພົວພັນລະຫວ່າງຄົນແບບອື່ນ, ນອກຈາກ ຜົນປະໂຫຍດອ້ອຍຕ້ອຍ ແລະ "ເງິນອຳນະຫົດ" ໑) .

ຈິດຕະສາດຂອງຊົນຊັ້ນກຳມາຊີບເປັນສິ່ງກົງກັນຂ້າມກັບຈິດຕະສາດ ຂອງນາຍທຶນໂດຍກົງ. ບັນດາຜູ້ສ້າງຕັ້ງລັດທິມາກໄດ້ສັງເກດເຫັນຈຸດພິເສດ ຂອງຊົນຊັ້ນກຳມາຊີບເຊັ່ນ ຄວາມເດັດດ່ຽວຫນຽວແຫນ້ນ, ລັກສະນະປະຕິວັດ , ຄວາມກ້າຫານ ແລະ ຊື່ສັດ, ຄວາມຄຽດແຄ້ນຕໍ່ພວກກົດຂີ່ຂູດຮີດ, ນ້ຳໃຈອັນສູງສົ່ງຕໍ່ເພື່ອນສະຫາຍ ແລະ ຕໍ່ຫມູ່ຄະນະ. ຈິດຕະສາດສັງຄົມຂອງຊົນຊາດ, ເຜົ່າຊົນມີຄວາມຫມາຍສຳຄັນບໍ່ຫນ້ອຍກວ່ານີ້. ດັ່ງທີ່ທ່ານໄກສອນ ພົມວິຫານ-ໄດ້ຂຽນວ່າ ໃນການດຳເນີນວຽກງານເພື່ອເພີ່ມທະວີຄວາມສາມັກຄີ ປະຊາຊົນ "ຕ້ອງຄຳນຶງຢ່າງເຫມາະສົມເຖິງບັນຫາຈິດຕະສາດ, ຄວາມມຸ່ງມາດປາຖະຫນາ, ຮີດຄອງ ປະເພນີ, ຄວາມເຊື່ອຖື ຂອງແຕ່ລະຊົນຊາດ ເຜົ່າ-ຊົນ..." ໒) .

ສະຕິແບບທິດສະດີມີລະດັບຄືແນວຄິດສັງຄົມແລະ ວິທະຍາສາດ.

ໂດຍແຕກຕ່າງກັນກັບຈິດຕະສາດສັງຄົມ, ແນວຄິດສັງຄົມ ບໍ່ແມ່ນ ການສ່ອງແສງແບບທຳມະດາ, ຫາກແມ່ນການສ່ອງແສງເຖິງການດຳລົງຄົງຕົວສັງຄົມໃນດ້ານທິດສະດີ. ມັນແມ່ນການປະກົດຕົວດ້ານທິດສະດີ ກ່ຽວກັບ ຜົນປະໂຫຍດຮາກຖານຂອງບັນດາຊົນຊັ້ນ ແລະ ພັກຂອງຊົນຊັ້ນ. ແນວຄິດ ອຳນວຍຄວາມສະດວກໃຫ້ແກ່ການເພີ່ມທະວີ ແລະ ເສີມຂະຫຍາຍຫລືຫລຸດຜ່ອນ ແລະ ລົບລ້າງລະບອບສັງຄົມທີ່ມີຢູ່. ເຊັ່ນ ແນວຄິດນາຍທຶນມີເປົ້າຫມາຍເພື່ອປົບປຸງ ແລະ ປົກປັກຮັກສາລັດທິນາຍທຶນໃຫ້ຫມັ້ນຄົງ. ແນວຄິດສັງຄົມນິຍົມ, ເຊິ່ງ ມີພັກກອມມູນິດ ແລະ ພັກກຳມະກອນເປັນຜູ້ຕາງຫນ້າໃນບັນດາປະເທດທຶນນິຍົມ

---

໑) ກ.ມາກ ແລະ ຟ.ອັງແກນ. ນິພົນ, ເຫລັ້ມ ໔, ຫນ້າ ໔໒໖.

໒) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ . ຫນ້າ ໒໑໗.

ນັ້ນ ເປັນພື້ນຖານສຳລັບການລົບລ້າງລະບອບທຶນນິຍົມ ແລະ ລະບອບນີ້ ຕ້ອງຖືກປ່ຽນແທນດ້ວຍສັງຄົມນິຍົມ.

ໂດຍຍອມຮັບວ່າ ແນວຄິດຕາງຫນ້າໃຫ້ແກ່ຜົນປະໂຫຍດຂອງຊົນຊັ້ນໃດເຊັ່ນ ຜົນປະໂຫຍດຂອງຊົນຊັ້ນທີ່ກ້າວຫນ້າຫລືປະຕິການ, ແນວຄິດອາດຈະເປັນແບບວິທະຍາສາດ ຫລືບໍ່ວິທະຍາສາດ, ປະຕິວັດຫລືປະຕິຮູບ, ກ້າວຫນ້າ ຫລືປະຕິການ. ໃນຖານະເປັນອາວຸດດ້ານຈິດໃຈແລ້ວ, ແນວຄິດສ້າງ ພື້ນຖານດ້ານທິດສະດີ ໃຫ້ແກ່ຜົນປະໂຫຍດຂອງຊົນຊັ້ນ, ເຕົ້າໂຮມສະມາຊິກຊົນຊັ້ນ ດັ່ງກ່າວບົນພື້ນຖານຄຸນຄ່າທາງຈິດໃຈຂອງຊົນຊັ້ນນັ້ນ. ໂດຍສອດຄ່ອງກັບແນວຄິດຂອງຕົນແລ້ວ ຊົນຊັ້ນດັ່ງກ່າວ ວາງໂຄງການດຳເນີນງານຂອງຕົນ, ວາງຈຸດປະສົງ ແລະ ຫນ້າທີ່, ກຳນົດພາຫະນະ ແລະ ເສັ້ນທາງເພື່ອບັນລຸຈຸດປະສົງທີ່ໄດ້ຄາດຫມາຍ ແລະ ຫນ້າທີ່ ທີ່ໄດ້ວາງອອກມາ.

ເນື້ອໃນ, ຈຸດປະສົງ ແລະ ຫນ້າທີ່ຂອງແນວຄິດສັງຄົມນິຍົມ ກົງກັນຂ້າມໂດຍກົງກັບແນວຄິດທຶນນິຍົມ. ແນວຄິດສັງຄົມນິຍົມເປັນຕົວແທນໃຫ້ແກ່ ຜົນປະໂຫຍດພື້ນຖານ ແລະ ອຸດົມຄະຕິຂອງຊົນຊັ້ນທີ່ກ້າວຫນ້າທີ່ສຸດຂອງ ຍຸກສະໄຫມ ຄືຊົນຊັ້ນກຳມະກອນ. ຊົນຊັ້ນກຳມະກອນ ທີ່ມີຜົນປະໂຫຍດກົງກັນກັບບັນດາກົດເກນພາວະວິໄສແຫ່ງການຂະຫຍາຍຕົວທາງສັງຄົມນັ້ນ ຕ້ອງການໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງ ແລະ ວິທະຍາສາດກ່ຽວກັບຄວາມເປັນຈິງ. ແນວຄິດຂອງເຂົາເຈົ້າແມ່ນລັດທິມາກ-ເລນິນ. ບັນດາສ່ວນປະກອບຂອງລັດທິມາກ-ເລນິນ ແມ່ນປັດຊະຍາ ມາກ-ເລນິນ, ເສດຖະສາດການເມືອງ ແລະ ລັດທິກອມມູນິດນິຍົມວິທະຍາສາດ. ທິດສະດີມາກ-ເລນິນ ຍັງກອມລວມເອົາ ທັງຈັນຍາຂອງລັດທິມາກ, ສິລະປະທັດ, ລັດທິອະເທບ ແບບວິທະຍາສາດແລະບັນດາວິທະຍາສາດສັງຄົມຂະແຫນງອື່ນໆ.

ກົງກັນຂ້າມກັບການບໍ່ມີລັກສະນະພັກແບບຈອມປອມຂອງແນວຄິດນາຍທຶນ, ແນວຄິດມາກ-ເລນິນ ປະກາດຢ່າງເປີດເຜີຍກ່ຽວກັບລັກສະນະພັກຂອງຕົນ . ມັນຢືນຢູ່ທັດສະນະແຫ່ງການຕໍ່ສູ້ແນວຄິດນາຍທຶນຢ່າງ ບໍ່ປະນີປະນອມແລະມີລັກສະນະບຸກ. ວ.ອີ.ເລນິນ ໄດ້ສັ່ງສອນວ່າ ໃນໂລກມີພຽງແຕ່ສອງແນວຄິດ - ເທົ່ານັ້ນ: "...ບັນຫາຕັ້ງຂຶ້ນມາມີແຕ່ພຽງເທົ່ານີ້: ແນວຄິດນາຍທຶນ ຫລືແນວຄິດສັງຄົມນິຍົມ. ໃນນັ້ນບໍ່ມີແນວຄິດລະຫວ່າງກາງ...ດ້ວຍເຫດນັ້ນການ

ຖືເບົາແນວຄິດສັງຄົມນິຍົມ, ການຫຼີກຫ່າງອອກຈາກແນວຄິດສັງຄົມນິຍົມ ຈຶ່ງໝາຍເຖິງການເພີ່ມທະວີຂອງແນວຄິດນາຍທຶນ" [1]. ພ.ກ.ສ.ຊ. ປະຕິບັດຢ່າງ ຊື່ສັດບໍລິສຸດຕໍ່ຄວາມສັ່ງສອນດັ່ງກ່າວຂອງເລນິນ. ເອກະສານ ຂອງພັກໄດ້ເນັ້ນໜັກວ່າ: "ໃນການຕໍ່ສູ້ລະຫວ່າງສອງໂລກະທັດບໍ່ອາດຈະຈຶ່ງຍອມໃຫ້ແກ່ລັດທິເປັນກາງ ແລະ ການຜ່ອນສັ້ນຜ່ອນຍາວ" [2].

ລັກສະນະພັກ ແລະ ລັກສະນະຈິນຈຸ້ນ ຂອງແນວຄິດມາກ-ເລນິນ ບໍ່ຝືນກັບລັກສະນະວິທະຍາສາດຂອງມັນ. ລັດທິມາກ-ເລນິນ ແມ່ນແນວຄິດ ແລະວິທະຍາສາດພ້ອມໆກັນ. ມັນແມ່ນແນວຄິດທີ່ມີວິທະຍາສາດ. ມັນສ່ອງແສງຢ່າງຖືກຕ້ອງເຖິງລັກສະນະຖືກຕ້ອງຕາມກົດເກນຢ່າງພາວະວິໄສຂອງການ ຂະຫຍາຍຕົວທາງສັງຄົມ ແລະ ອະທິບາຍຢ່າງມີວິທະຍາສາດ ແລະວາງພື້ນຖານໃຫ້ແກ່ໜ້າທີ່ປະຫວັດສາດຂອງຈິນຈຸ້ນກຳມະກອນ.

ວິທະຍາສາດ ແມ່ນປະກົດການສັງຄົມທີ່ສັບສົນ. ມັນແມ່ນທັງການ ເຄື່ອນໄຫວເພື່ອຜະລິດຄວາມຮູ້, ແມ່ນທັງລະບົບຄວາມຮູ້ກ່ຽວກັບໂລກ, ແມ່ນທັງກຳລັງແຫ່ງການຜະລິດໂດຍກົງຂອງສັງຄົມ. ໃນຖານະເປັນລະບົບຄວາມຮູ້ ກ່ຽວກັບໂລກ ວິທະຍາສາດແມ່ນຮູບແບບຂອງສະຕິສັງຄົມ. ຄວາມຮູ້ວິທະຍາ ສາດແມ່ນຄວາມຮູ້ທີ່ແທ້ຈິງ ແລະ ຖືກຕ້ອງ. ຄວາມຮູ້ດັ່ງກ່າວນີ້ ບໍ່ພຽງແຕ່ ສ່ອງແສງເຖິງຄວາມຮູ້ກ່ຽວກັບເຫດການຕົວຈິງ, ດ້ານນອກຂອງຄວາມເປັນ ຈິງເທົ່ານັ້ນ, ແຕ່ຍັງສ່ອງແສງເຖິງ ສິ່ງທີ່ຢູ່ເບື້ອງໃນ ແລະ ຖືກຕ້ອງຕາມ ກົດເກນຢູ່ໃນການຂະຫຍາຍຕົວຂອງໂລກອີກ. ວິທະຍາສາດຄົ້ນຄິດບັນດາຮູບແບບ ແລະ ວິທີການຮັບຮູ້ທີ່ອຳນວຍໃຫ້ຄົ້ນພົບສິ່ງທີ່ເຊື່ອງຊ້ອນຢູ່ໃນກະໂຕບັນດາ ປະກົດການແລະໄຈ້ແຍກທາດແທ້ຂອງປະກົດການດັ່ງກ່າວ.

ລະຫວ່າງຄວາມຮູ້ ບົດຮຽນນິຍົມ, ຈິດຕະສາດສັງຄົມ, ແນວຄິດ ແລະວິທະຍາສາດມີສາຍພົວພັນແບບສັດຈະວິພາກ. ເຊັ່ນຈິດຕະສາດສັງຄົມສົ່ງຜົນສະທ້ອນໃສ່ການຂະຫຍາຍຕົວຂອງແນວຄິດ. ແນວຄິດຂອງສັງຄົມຕ້ອງຄຳນຶງເຖິງ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ. ເຫຼັ້ມ ໖, ໜ້າ ໓໙-໔໐.

໒) " ເອກະສານກອງປະຊຸມໃຫຍ່ຄັ້ງທີ ໒໖ ພ.ກ.ສ.ຊ." ມົດສະກູ , ໑໙໗໖, ໜ້າ ໗໔.

ຄວາມເຫັນຂອງສັງຄົມ, ຄວາມຮູ້ສຶກທາງຊົນຊັ້ນແລະຊົນຊາດຂອງຄົນ,ໝາຍຄວາມວ່າ ຕ້ອງຄຳນຶງເຖິງຈິດຕະສາດສັງຄົມຂອງພວກເຂົາເຈົ້າ. ອີກດ້ານໜຶ່ງ ແນວຄິດກະທົບໃສ່ຈິດຕະສາດສັງຄົມໂດຍຜ່ານການໂຄສະນາ ແລະ ອົບຂວາຍ. ມັນຍົກສູງລະດັບສະຕິຂອງຄົນຈາກແບບທຳມະດາຂຶ້ນສູ່ແບບທິດສະດີ, ກໍ່ສ້າງໂລກະທັດແບບມີວິທະຍາສາດຂອງຄົນ. ບັນດາພັກກອມມູນິດ ແລະ ພັກກຳມະກອນເປັນຜູ້ນຳເອົາແນວຄິດແບບມີວິທະຍາສາດໄປສູ່ສະຕິຂອງຊາວ ຜູ້ອອກແຮງງານ.

ຄຽງຄູ່ກັບສະຕິສັງຄົມຍັງມີສະຕິຂອງບັນດາບຸກຄົນ ໝາຍຄວາມວ່າ ສະຕິບຸກຄົນ. ສະຕິນີ້ສ່ອງແສງເຖິງເງື່ອນໄຂຊີວິດການເປັນຢູ່ຂອງແຕ່ລະຄົນ,ເຖິງການດຳລົງຄົງຕົວຂອງເຂົາ. ສະຕິບຸກຄົນມີການພົວພັນແບບສັດຈະວິພາກ ກັບສະຕິສັງຄົມທຸກໆແນວຄິດ ແລະ ຄວາມຄິດໃນເບື້ອງຕົ້ນ ໄດ້ເກີດຂຶ້ນມາໃນສະຕິບຸກຄົນ. ຫລັງຈາກນັ້ນຈຶ່ງກາຍເປັນຊັບສົມບັດຂອງສັງຄົມ ແລະ ບົນພື້ນຖານນີ້ຈຶ່ງມີການສ້າງຕັ້ງສະຕິສັງຄົມ. ແຕ່ສະຕິສັງຄົມບໍ່ແມ່ນຜົນບວກຂອງບັນດາສະຕິບຸກຄົນ. ມັນແມ່ນການສ້າງຕັ້ງໃໝ່ໃນດ້ານຄຸນນະພາບ ແລະ ບໍ່ສ່ອງ ແສງເຖິງການດຳລົງຄົງຢູ່ຂອງບາງບຸກຄົນ. ຫາກສ່ອງແສງເຖິງການດຳລົງຄົງຢູ່ຂອງຊົນຊັ້ນ, ຂອງຊາດ ແລະ ຂອງສັງຄົມເວົ້າລວມ. ເມື່ອໄດ້ຮັບການສ້າງຕັ້ງຂຶ້ນມາແລ້ວ, ສະຕິສັງຄົມສົ່ງຜົນສະທ້ອນອັນໃຫຍ່ຫລວງຕໍ່ການສ້າງຕັ້ງສະຕິບຸກຄົນ. ເນື້ອໃນຂອງສະຕິບຸກຄົນແມ່ນຄວາມຄິດທີ່ສັງຄົມໄດ້ສ້າງໃຫ້ແກ່ ຄົນໂດຍຜ່ານຄອບຄົວ, ໂຮງຮຽນ, ໝູ່ຄະນະ, ລະບົບການສຶກສາຂອງລັດ,ບັນດາອົງການຈັດຕັ້ງມະຫາຊົນ, ພາຫະນະສື່ສານທົ່ວໄປ. ໃນສັງຄົມທີ່ມີ ຊົນຊັ້ນສະຕິຂອງຊົນຊັ້ນຕ່າງໆສົ່ງຜົນສະທ້ອນໃສ່ສະຕິບຸກຄົນ. ດ້ວຍເຫດນັ້ນ, ຄຽງຄູ່ກັບຄວາມຮັບຮູ້ແບບມີວິທະຍາສາດເຊິ່ງແມ່ນກຳລັງທີ່ກ້າວໜ້າຢູ່ໃນສັງຄົມ(ກ່ອນອື່ນໝົດກໍ່ແມ່ນຊົນຊັ້ນກຳມະກອນ ແລະ ແນວຄິດຂອງເຂົາເຈົ້າ )ໄດ້ສ້າງໃຫ້ຄົນແລ້ວ, ໃນສະຕິບຸກຄົນອາດຈະມີທັງຄວາມຮັບຮູ້ຂອງຊົນຊັ້ນທີ່ປະຕິການແລະຫລ້າຫລັງໄປແລ້ວ.

## ໔. ຄວາມເປັນເອກະລາດແບບທຽບຖານຂອງ ສະຕິສັງຄົມແລະບົດບາດຂອງມັນໃນສັງຄົມ

ຂະບວນວິວັດແຫ່ງການສ່ອງແສງການດຳລົງຄົງຕົວສັງຄົມ ຢູ່ໃນສະຕິ ສັງຄົມນັ້ນມີລັກສະນະທີ່ສັບສົນ ແລະ ອັດແຍ່ງກັນ. ທຽບໃສ່ການດຳລົງຄົງຕົວແລ້ວ ສະຕິສັງຄົມ ມີຄວາມເປັນເອກະລາດທຽບຖານ. ຄວາມຮູ້ກ່ຽວກັບ "ຄວາມເປັນເອກະລາດທຽບຖານ" ຫມາຍເຖິງສະຕິສັງຄົມ ບໍ່ອາດຈະມີຄວາມ ເປັນເອກະລາດເດັດຖານໄດ້. ບັນດານັກປັດຊະຍາທີ່ຮັບຮູ້ຄວາມເປັນເອກະລາດ-ເດັດຖານຂອງສະຕິສັງຄົມນັ້ນ ມີທັດສະນະລັດທິຈິດຕະນິຍົມ ໃນການເຂົ້າໃຈ-ກ່ຽວກັບປະຫວັດສາດ.

ປະຫວັດສາດເປັນສິ່ງກຳນົດຄວາມເປັນເອກະລາດທຽບຖານຂອງສະຕິສັງຄົມ. ກ.ມາກ ແລະ ຟ.ອັງແກນ ໄດ້ຊີ້ແຈງວ່າ ໃນສັງຄົມປະຖົມບູຮານ ສະຕິຂອງຄົນ ປະສານສົມທົບຢ່າງແຫນ້ນແຟ້ນ ກັບຊີວິດຕົວຈິງ. ຕາມຄວາມເຫັນຂອງທ່ານທັງສອງແລ້ວ ອັນນີ້ແມ່ນສະຕິແບບ "ກົກເຫລົ່າ", ແບບ "ເປັນຝູງເປັນພິງ". ໃນໄລຍະນັ້ນ ສັງຄົມບໍ່ສາມາດຈະປົດປ່ອຍຜູ້ໃດ ອອກຈາກ ການເຄື່ອນໄຫວ ເພື່ອສະແຫວງຫາພາຫະນະຮັບປະກັນການລ້ຽງຊີບ. ໃນຂະນະທີ່ສະມັດຖະພາບຂອງການອອກແຮງງານ ໄດ້ເຕີບໃຫຍ່ຂະຫຍາຍຕົວ ຈຶ່ງ ໄດ້ມີການແບ່ງງານ ອອກເປັນແຮງງານດ້ວຍມັນສະຫມອງ ແລະ ດ້ວຍຮ່າງກາຍ. ກ.ມາກ ແລະ ຟ.ອັງແກນ ຂຽນວ່າ: "ການແບ່ງງານໄດ້ກາຍເປັນ ການແຍກອອກຈາກກັນຢ່າງແທ້ຈິງ ກໍ່ແຕ່ໃນເມື່ອໄດ້ມີການແບ່ງງານດ້ວຍວັດຖຸແລະຈິດໃຈ". ໑) ໃນນັ້ນ ແຮງງານດ້ານຈິດໃຈໄດ້ກາຍເປັນອະພິສິດ ຂອງຊົນຊັ້ນຮັ່ງມີ, ແລະ ແຮງງານດ້ວຍຮ່າງກາຍຍັງສືບຕໍ່ເປັນກຳເວນຂອງບັນດາຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງ ແລະ ຖືກກົດຂີ່ຂູດຮີດ. ນັບແຕ່ນັ້ນມາສະຕິຂອງຄົນມີເອກະລາດຢ່າງທຽບຖານ ໃນການເຄື່ອນໄຫວ ແລະ ການດຳລົງຊີວິດຂອງພວກເຂົາເຈົ້າ.

---

໑) ກ.ມາກ ແລະ ຟ.ອັງແກນ ບົດນິພົນ ເຫລັ້ມ ໓, ຫນ້າ ໓໐.

ລັກສະນະສືບທອດໃນການກໍ່ສ້າງ ແລະ ເສີມຂະຫຍາຍສະຕິສັງຄົມນັ້ນ ມີບົດບາດອັນສຳຄັນ ໃນຄວາມເປັນເອກະລາດທຽບຖານຂອງມັນ. ຄົນຮັບເອົາຄວາມຮູ້ກ່ຽວກັບໂລກບໍ່ພຽງແຕ່ຜ່ານການຮັບຮູ້ຄວາມເປັນຈິງຮອບຕົວເທົ່ານັ້ນ. ຜູ້ເປັນພໍ່ແມ່, ອາຈານ ແລະ ຄູສອນ ເປັນຜູ້ສົ່ງຄວາມຮູ້ດັ່ງກ່າວໃຫ້ພວກເຂົາເຈົ້າ, ພວກເຂົາເຈົ້າອ່ານປື້ມ, ເຊິ່ງແມ່ນຕົວແທນຂອງຍຸກສະໄໝ ແລະຄົນຮຸ່ນກ່ອນໆເປັນຜູ້ຂຽນໄວ້. ນອກຈາກນັ້ນຄົນຮຽນຮູ້ຮີດຄອງປະເພນີ ແລະ ມູນເຊື້ອ, ທີ່ໄດ້ສ່ອງແສງເຖິງເງື່ອນໄຂຊີວິດການເປັນຢູ່ ຂອງປູ່ຍ່າຕາຍາຍຂອງພວກເຂົາເຈົ້າ.

ຄວາມເປັນເອກະລາດທຽບຖານ ຂອງສະຕິສັງຄົມ ອາດຈະສະແດງອອກໃນການທີ່ມັນຊັກຊ້າກວ່າການດຳລົງຄົງຕົວສັງຄົມ. ເນື່ອງຈາກວ່າການດຳລົງຄົງຕົວສັງຄົມ ຂະຫຍາຍຕົວຕາມກົດເກນພາວະວິໄສທີ່ບໍ່ຂຶ້ນກັບມານະຈິດ ແລະ ສະຕິຂອງຄົນແລ້ວ, ການປ່ຽນແປງດ້ານການດຳລົງຄົງຕົວສັງຄົມ ຈຶ່ງສ່ອງ - ແສງອອກໃນສະຕິສັງຄົມ ຫລັງຈາກທີ່ການປ່ຽນແປງດັ່ງກ່າວໄດ້ດຳເນີນ ໄປແລ້ວ. ການຊັກຊ້າດັ່ງກ່າວນີ້ ສາມາດເປັນແບບແຕກຕ່າງກັນ. ການປ່ຽນ - ແປງດ້ານການດຳລົງຄົງຕົວສັງຄົມຈຳນວນໜຶ່ງ ສ່ອງແສງອອກໃນສະຕິສັງຄົມຢ່າງໄວວາ, ອີກຈຳນວນໜຶ່ງຢ່າງ ຊ້າໆ. ເຊັ່ນຕົວຢ່າງ ການປ່ຽນແປງ - ດ້ານເງື່ອນໄຂຊີວິດການເປັນຢູ່ ສ່ອງແສງອອກໃນສະຕິການເມືອງໄວກວ່າໃນສະຕິສິນທຳຢ່າງຫລາຍ. ຂະບວນວິວັດແຫ່ງຊີວິດສັງຄົມທີ່ເປີດແປນ ແລະງ່າຍດາຍກວ່າ ສ່ອງແສງອອກໃນສະຕິຂອງຄົນໄວກວ່າບັນດາຂະບວນວິວັດ ທີ່ສະຫລັບສັບຊ້ອນແລະສັບສົນ.

ສະຕິສັງຄົມສາມາດກ້າວໄປກ່ອນການດຳລົງຄົງຕົວສັງຄົມ. ການກ້າວໄປກ່ອນດັ່ງນີ້ ດຳເນີນໄປບົນພື້ນຖານທີ່ຄົນໄດ້ຮັບຮູ້ບັນດາກົດເກນ ແລະ ທ່າອຽງໃນການຂະຫຍາຍຕົວຂອງທຳມະຊາດ ແລະ ສັງຄົມ ແລະ ກ່ອນອື່ນໝົດອັນນີ້ໄດ້ສະແດງອອກ ໃນການຄາດຄະເນຜົນສະທ້ອນ ແລະ ຜົນທີ່ຈະໄດ້ຮັບຈາກການເຄື່ອນໄຫວຂອງຄົນ. ການຄາດຄະເນອາດສາມາດເປັນໄປໄດ້ໃນລະດັບສະຕິແບບທຳມະດາ, ກໍຄືໃນລະດັບສະຕິແບບທິດສະດີ, ແບບວິທະຍາສາດ. ຕົວຢ່າງຂອງການຄາດຄະເນແບບທຳມະດາ ກໍຄືການທີ່ຄົນຄາດຄະເນໝາກ-ຜົນການເຄື່ອນໄຫວຂອງຕົນ. ເຊັ່ນ, ຊາວນາຫວ່ານແນວປູກລົງດິນ, ໂດຍ

ຄາດຫວັງໄດ້ພົບເກັບກ່ຽວໃນອະນາຄົດ. ຊ່າງໄມ້ລົງມືປູກເຮືອນ, ສຳນຶກ - ອອກໃນສະຕິຂອງຕົນວ່າ ເຮືອນຈະເປັນແບບໃດ. ກ.ມາກ ຂຽນວ່າ: "ແມງມຸມດຳເນີນການເຄື່ອນໄຫວທີ່ຄ້າຍຄືກັນກັບ ການເຄື່ອນໄຫວຂອງຊ່າງຕຳແຜ່ນ ແລະເຜິ້ງກໍ່ຮັງ ເຮັດໃຫ້ຄົນຈຳນວນໜຶ່ງ ຄືບັນດານັກສະຖາປານິກ ຕ້ອງອັບອາຍ. ແຕ່ນັກສະຖາປານິກຜູ້ຂີ້ຮ້າຍທີ່ສຸດ ແຕກຕ່າງກັບເຜິ້ງທີ່ເກັ່ງທີ່ສຸດແຕ່ຕົ້ນພຸ້ນ ຢູ່ບ່ອນວ່າ ກ່ອນຈະກໍ່ຮັງເຜິ້ງ ເຂົາໄດ້ກໍ່ແບບສຳນຶກເອົາໃນຫົວ ຂອງຕົນກ່ອນແລ້ວ. ໃນຕອນທ້າຍຂະບວນວິວັດແຫ່ງການອອກແຮງງານກໍ່ໄດ້ຮັບໝາກຜົນ ທີ່ຄົນໄດ້ສຳນຶກໄວ້ກ່ອນທີ່ຈະເລີ່ມຕົ້ນຂະບວນວິວັດດັ່ງກ່າວ..."໑).

ການຄາດຄະເນແບບວິທະຍາສາດ ພົວພັນກັນກັບການຄາດຄະເນ ບັນດາປະກົດການ ແລະ ຂະບວນວິວັດທີ່ໃນໄລຍະນັ້ນຄົນບໍ່ທັນຮູ້ເທື່ອ. ເຊັ່ນ ນັກເຄມີສາດຜູ້ຍິ່ງໃຫຍ່ຊາວລັດເຊຍ ດະມິຕຣີ ເມນເດເລເຢບ(໑໘໓໔ - ໑໙໐໗ ) ໄດ້ຄາດຄະເນການຄົ້ນພົບທາດເຄມີຕ່າງໆທີ່ວິທະຍາສາດບໍ່ທັນຮູ້ຈັກເທື່ອ. ຈົນກະທັ້ງວ່າທ່ານໄດ້ຄິດໄລ່ນ້ຳໜັກປະລະມານູແລະ ໂຄງປະກອບຂອງທາດ ດັ່ງກ່າວໄວ້. ທ່ານເຮັດດັ່ງນີ້ໄດ້ກໍ່ແມ່ນບົນພື້ນຖານກົດເກນແຫ່ງສາຍພົວພັນກັນລະຫວ່າງ ສ່ວນປະກອບຂອງທາດຕ່າງໆ ທີ່ທ່ານໄດ້ຄົ້ນພົບ.

ບົນພື້ນຖານການຄົ້ນຄວ້າບັນດາກົດເກນພາວະວິໄສ ແຫ່ງການຂະຫຍາຍ-ຕົວຂອງສັງຄົມ. ກ.ມາກ ແລະ ຝ.ອັງແກນ ໄດ້ຄາດຄະເນການປ່ຽນ ແທນສັງຄົມທຶນນິຍົມ ດ້ວຍສັງຄົມກອມມູນິດນິຍົມ. ດ້ວຍການຄົ້ນພົບດັ່ງກ່າວທ່ານທັງສອງໄດ້ແນມໄປທາງໜ້າກວ່າໜຶ່ງຮ້ອຍປີ. ລັກສະນະພິເສດຂອງສັງຄົມກອມມູນິດນິຍົມ ທີ່ພວກທ່ານໄດ້ຊີ້ແຈງອອກມານັ້ນ ໄດ້ຮັບການຢັ້ງຢືນ ໃນບັນດາປະເທດ ໃນວົງຄະນາຍາດສັງຄົມນິຍົມ. ອັນນີ້ແມ່ນການຢັ້ງຢືນທີ່ໃສແຈ້ງ ໃຫ້ແກ່ການທີ່ສະຕິຂອງຄົນມີຄວາມສາມາດກ້າວໜ້າກວ່າເຫດການປະຈຳວັນ ແລະແນມເຫັນອະນາຄົດອັນຍາວໄກ.

ສະຕິສັງຄົມສາມາດສົ່ງຜົນສະທ້ອນແບບຕາວຄືນໃສ່ການດຳລົງຄົງຕົວ ສັງຄົມ, ເນື່ອງຈາກວ່າສະຕິສ່ອງແສງເຖິງການດຳລົງຄົງຕົວຢູ່ບໍ່ແມ່ນຢ່າງຫຍໍ້ທໍ້, ແຕ່ຫາກແມ່ນຢ່າງຕັ້ງໜ້າ. ຄວາມຕັ້ງໜ້າຂອງການສ່ອງແສງສາມາດ ເປັນ

---

໑) ກ.ມາກ ແລະ ຝ.ອັງແກນ, ບົດນິພົນເຫຼັ້ມ ໔໓, ໜ້າ ໑໘໙.

ສາມແບບຄື: ສົ່ງເສີມການຂະຫຍາຍຕົວ ຂອງການດຳລົງຄົງຕົວສັງຄົມ, ເລັ່ງລັດການຂະຫຍາຍຕົວຂອງມັນ; ຖ່ວງດຶງການຂະຫຍາຍຕົວຂອງສັງຄົມ; ສົ່ງເສີມການຂະຫຍາຍຕົວຂອງບາງດ້ານໃນຊີວິດສັງຄົມ ແລະ ຖ່ວງດຶງ ການຂະຫຍາຍຕົວຂອງດ້ານອື່ນ.

ທິດທາງແລະລະດັບຂອງຜົນສະທ້ອນທີ່ສະຕິສັງຄົມມີຕໍ່ການດຳລົງຄົງຕົວສັງຄົມນັ້ນ ກ່ອນອື່ນໝົດແມ່ນຂຶ້ນກັບຄວາມຖືກຕ້ອງ ແລະ ເລິກເຊິ່ງຂອງການ - ສ່ອງແສງ ເຊັ່ນ ສະຕິສັງຄົມທີ່ມີໂລກະທັດ ແບບມີວິທະຍາສາດ ແລະ ວັດຖຸນິຍົມ ປະກອບເປັນພື້ນຖານນັ້ນ ແມ່ນສິ່ງຊຸກຍູ້ທີ່ເຂັ້ມແຂງແຮງກ້າ ໃຫ້ແກ່ການ-ຂະຫຍາຍຕົວ ຂອງການດຳລົງຄົງຕົວສັງຄົມ. ກົງກັນຂ້າມ, ສະຕິສັງຄົມເຊິ່ງມີໂລກະທັດແບບບໍ່ມີວິທະຍາສາດ ແລະ ຈິດຕະນິຍົມເປັນພື້ນຖານນັ້ນແມ່ນການຖ່ວງດຶງໃຫ້ແກ່ການຂະຫຍາຍຕົວດ້ານສັງຄົມ. ຫາກແຕ່ວ່າໃນທັງກໍລະນີທີໜຶ່ງ ແລະ ທີສອງນີ້ ສະຕິສັງຄົມລ້ວນແຕ່ແມ່ນປັດໄຈທີ່ຕັ້ງໜ້າຈຶ່ງສົ່ງຜົນສະທ້ອນໃສ່ການດຳລົງຄົງຕົວສັງຄົມ.

ລະດັບທີ່ສະຕິສັງຄົມສົ່ງຜົນສະທ້ອນໃສ່ການດຳລົງຄົງຕົວສັງຄົມນັ້ນ ໃນຫລາຍດ້ານຂຶ້ນກັບການທີ່ວ່າ ແມ່ນຊົນຊັ້ນໃດເປັນຜູ້ຕາງໜ້າໃຫ້ສະຕິດັ່ງກ່າວ. ຊົນຊັ້ນທີ່ກ້າວໜ້າ (ຕົວຢ່າງຄື ຊົນຊັ້ນກຳມະກອນ) ທີ່ມີແນວຄິດກ້າວໜ້າປະກອບເປັນອາວຸດ, ສົ່ງຜົນສະທ້ອນທີ່ອຳນວຍຜົນແກ່ການຂະຫຍາຍຕົວຂອງການດຳລົງຄົງຕົວສັງຄົມ. ຊົນຊັ້ນທີ່ຫລ້າຫລັງ ແລະ ປະຕິການ (ເຊັ່ນ ນາຍທຶນ ແລະ ກ່ອນອື່ນໝົດ ແມ່ນກຸ່ມຈັກກະພັດນິຍົມນຳໜ້າຂອງມັນ) ໃຊ້ສະຕິ ຂອງຕົນຖ່ວງດຶງການຂະຫຍາຍຕົວຂອງສັງຄົມ.

ການກະທົບແບບຕ່າວຄືນ ຂອງສະຕິສັງຄົມ ຕໍ່ການດຳລົງຄົງຕົວສັງຄົມຍິ່ງຈະແຮງຂຶ້ນ, ຖ້າຫາກແນວຄິດນີ້ ຫລື ແນວຄິດນັ້ນໄດ້ຮັບການແຜ່ຂະຫຍາຍໃນໝູ່ມະຫາຊົນຢ່າງກວ້າງຂວາງ. ຫລັກການອັນລື່ລັ່ນ ຂອງ ກ.ມາກ ກ່ຽວກັບເລື່ອງທີ່ວ່າ "ທິດສະດີຈະກາຍເປັນກຳລັງດ້ານວັດຖຸ" ຖ້າຫາກມັນໄດ້ກອມລວມເອົາໝູ່ມະຫາຊົນແລ້ວ " [໑]ນັ້ນ ໄດ້ຮັບການຮັບຮູ້ຢ່າງກວ້າງຂວາງ. ບັນດາພັກກອມມູນິດ ແລະ ພັກກຳມະກອນຖືວ່າໜຶ່ງໃນຈຳນວນໜ້າທີ່ ທີ່ ສຳ

---

໑) ກ.ມາກ ແລະ ຟ.ອັງແກນ,ບົດນິພົນເຫລັ້ມ ໑, ໜ້າ ໔໘໘.

ຄັນທີ່ສຸດຂອງຕົນ ແມ່ນຕ້ອງປະກອບໃຫ້ຊາວຜູ້ອອກແຮງງານ ມີໂລກະທັດ ທີ່ມີວິທະຍາສາດຢ່າງແທ້ຈິງເປັນອາວຸດ, ອົບຮົມກໍ່ສ້າງໃຫ້ເຂົາເຈົ້າມີທັດສະນະ-ແລະ ແນວຄິດທີ່ກ້າວໜ້າ.

ການທີ່ໂລກະທັດ ມາກ-ເລນິນ ໄດ້ຮັບການແຜ່ຂະຫຍາຍອອກຢ່າງກວ້າງຂວາງນັ້ນ ກ່ອນອື່ນໝົດກໍ່ຍ້ອນວ່າ ມັນສອດຄ່ອງກັບຜົນປະໂຫຍດຮາກຖານ -ຂອງໝູ່ມະຫາຊົນຊາວຜູ້ອອກແຮງງານຈຳນວນຫລວງຫລາຍ. ລັດທິມາກ-ເລນິນ ໄດ້ດຶງດູດເອົາມະຫາຊົນຊາວຜູ້ອອກແຮງງານເປັນລ້ານໆ ໃນທຸກໆທະວີບເຂົ້າຮ່ວມໃນການເຄື່ອນໄຫວຢ່າງຕັ້ງໜ້າ ເພື່ອດັດສ້າງໂລກແບບປະຕິວັດ . ໃນການຈັດຕັ້ງການຕໍ່ສູ້ຂອງໝູ່ມະຫາຊົນ ເພື່ອຕ້ານໂລກເກົ່າ ບັນດາພັກມາກ-ເລນິນ ໝູນໃຊ້ທິດສະດີປະຕິວັດທີ່ກ້າວໜ້າ, ເສີມຂະຫຍາຍທິດສະດີ ດັ່ງກ່າວຢ່າງມີຫົວຄິດປະດິດສ້າງ, ໂຄສະນາທິດສະດີນັ້ນໃນໝູ່ມະຫາຊົນ ຢ່າງກວ້າງຂວາງ.

ໃນບັນດາປະເທດທີ່ສັງຄົມນິຍົມໄດ້ຮັບການສ້າງຕັ້ງແລ້ວນັ້ນ ໄດ້ເກີດມີສະຕິປະເພດໃໝ່ດ້ານຫລັກການ ຄືສະຕິສັງຄົມ ສັງຄົມນິຍົມ. ສະຕິນັ້ນແມ່ນ ບາດກ້າວໃໝ່ ດ້ານຄຸນນະພາບໃນການຂະຫຍາຍຕົວຂອງຊີວິດຈິດໃຈຂອງສັງຄົມ. ຈຸດພິເສດດ້ານຄຸນນະພາບທີ່ສຳຄັນທີ່ສຸດຂອງສະຕິສັງຄົມ ສັງຄົມນິຍົມນັ້ນ ແມ່ນວ່າມັນບໍ່ມີຄວາມເປັນປໍລະປັກກັນ. ມັນມີຄວາມເປັນເອກະພາບດ້ານແນວຄິດ-ການເມືອງ ແລະຄຸນສົມບັດ. ສະຕິສັງຄົມນິຍົມແມ່ນການສ່ອງແສງໃຫ້ແກ່ການດຳລົງຄົງຕົວສັງຄົມນິຍົມ. ແຕ່ມັນບໍ່ໄດ້ເກີດຂຶ້ນມາຢ່າງອັດຕະໂນມັດຈາກການດຳລົງຄົງຕົວນັ້ນ, ຫາກໄດ້ຮັບການຢັ້ງຢືນທ່າມກາງການຕໍ່ສູ້ ຕ້ານລະບົບ ແນວຄິດຂອງນາຍທຶນ ແລະ ຈິດຕະສາດຂອງກຳມະສິດສ່ວນຕົວ ເຊິ່ງແມ່ນຈຸດພິ-ເສດຂອງສັງຄົມ ທີ່ມີຄວາມເປັນປໍລະປັກກັນ. ແຕ່ພາຍໃຕ້ສັງຄົມນິຍົມ, ຄຽງຄູ່ກັບທັດສະນະທີ່ກ້າວໜ້າແລ້ວ ໃນສະຕິຂອງຄົນຍັງຮັກສາແນວຄິດເສດເຫລືອທີ່ສືບທອດມາຈາກສັງຄົມເກົ່າ. ໃນນັ້ນມີເສດເຫລືອຈາກຈິດຕະສາດຂອງນາຍທຶນນ້ອຍ, ການຈຳແນກຊົນຊາດແລະອື່ນໆ. ທ່ານໄກສອນ ພົມວິຫານ ຂຽນວ່າ: "ເພາະສະນັ້ນການສຶກສາອົບຮົມ, ເຝິກຝົນຫລໍ່ຫລອມແລະຍົກສູງ ຫລັກໝັ້ນ, ແນວຄິດຂອງຊົນຊັ້ນກຳມະກອນຢ່າງບໍ່ຢຸດຢັ້ງ, ຕໍ່ສູ້ແລະກຳຈັດ ແກ້ໄຂບັນດາທັດສະນະແນວຄິດ ໄຮ້ກຳມາຊີບນັ້ນ ແມ່ນກົດເກນທີ່ຕ້ອງເປັນໄປ ໃນ

ວຽກງານກໍ່ສ້າງພັກຂອງພັກເຮົາ" ໑). ເຖິງວ່າຈະມີຮ່ອງຮອຍເສດເຫລືອຈາກອະດີດໃນສະຕິຂອງຄົນກໍ່ຕາມ, ໃນເງື່ອນໄຂສັງຄົມນິຍົມ ເຫດການ ປະຫວັດສາດທີ່ບໍ່ມີໃຜໂຕ້ຖຽງໄດ້ນັ້ນ ແມ່ນໄຊຊະນະຂອງສະຕິສັງຄົມໃຫມ່ ສັງຄົມນິຍົມ. ສະຕິນີ້ໄດ້ກາຍເປັນກຳລັງຊຸກດັນທີ່ເຂັ້ມແຂງແຮງກ້າ ຂອງການ ຂະຫຍາຍຕົວຂອງສັງຄົມນິຍົມ.

## ໓. ຮູບແບບຂອງສະຕິສັງຄົມ

ສະຕິສັງຄົມກວມລວມເອົາ ຮູບແບບທີ່ແຕກຕ່າງກັນ ເຊັ່ນ ສະຕິ ສັງຄົມດ້ານການເມືອງ, ກົດຫມາຍ, ສິນທຳ, ສິລະປະທັດ ແລະ ສາສະຫນາ.

ບັນດາຈຸດພິເສດອັນສຳຄັນທີ່ສຸດ ທີ່ບັນດາຮູບແບບຂອງສະຕິສັງຄົມມີຄວາມແຕກຕ່າງກັນນັ້ນ ແມ່ນເປົ້າຫມາຍແຫ່ງການສ່ອງແສງຄວາມຕ້ອງການຂອງສັງຄົມ ທີ່ພາໃຫ້ເກີດມີຮູບແບບທີ່ແນ່ນອນ ຂອງສະຕິອັນແນ່ນອນ; ວິທີ(ຮູບແບບ) ການສ່ອງແສງເຖິງການດຳລົງຄົງຕົວສັງຄົມ; ບົດບາດໃນຊີວິດຂອງສັງຄົມ.

ເປົ້າຫມາຍແຫ່ງການສ່ອງແສງ ແມ່ນດ້ານຫນຶ່ງຂອງຄວາມເປັນຈິງ ທີ່ຮູບແບບຂອງສະຕິສັງຄົມທີ່ກ່ຽວຂ້ອງ ສ່ອງແສງເຖິງ ເຊັ່ນ ສະຕິການເມືອງສ່ອງແສງເຖິງການພົວພັນລະຫວ່າງບັນດາຊົນຊັ້ນ, ປະຊາຊາດ ແລະລັດ. ສະຕິກົດຫມາຍສ່ອງແສງເຖິງ ການພົວພັນຂອງຄົນ ກັບກົດຫມາຍ ກັບສິດທິຕາມ ກົດຫມາຍ, ກັບຄວາມຍຸດຕິທຳ. ສະຕິສິນທຳແມ່ນການພົວພັນຂອງຄົນກັບຄົນ, ຕໍ່ຫມູ່ຄະນະ, ຕໍ່ຊົນຊັ້ນ, ຕໍ່ສັງຄົມ ໃນແງ່ຄວາມດີ, ຄວາມຊົ່ວ ແລະອື່ນໆ.

ຄວາມຕ້ອງການຂອງສັງຄົມ ແມ່ນຄວາມຕ້ອງການທີ່ພາໃຫ້ເກີດມີຮູບແບບຂອງສະຕິສັງຄົມແຕກຕ່າງກັນ ໃນການທີ່ມັນຮັບໃຊ້ຄວາມຕ້ອງການໃດແດ່ຂອງສັງຄົມ. ເຊັ່ນ ສະຕິການເມືອງໄດ້ເກີດມີມາຍ້ອນຊົນຊັ້ນ ແລະ ລັດໄດ້ປະກົດຕົວຂຶ້ນມາ. ມັນໄດ້ຮັບການສ້າງຕັ້ງຂຶ້ນມາເພື່ອສ້າງພື້ນຖານໃຫ້ແກ່ຜົນ ຜົນປະ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ... ຂອງການປະຕິວັດລາວ. ຫນ້າ ໓໑໒ - ໓໑໑.

ໂຫຍດຂອງຊົນຊັ້ນປົກຄອງ ແລະ ບົດບາດຂອງລັດ, ສ້າງໃຫ້ພົນລະເມືອງ - ຕ້ອງຮັບຮູ້ມານະຈິດຂອງຜູ້ປົກຄອງ ແລະ ຜູ້ຄຸ້ມຄອງ.

<u>ຮູບແບບຂອງການສອງແສງ</u>. ການດຳລົງຄົງຕົວສັງຄົມ ອາດໄດ້ຮັບການສ່ອງແສງອອກໃນສະຕິສັງຄົມ ໂດຍຜ່ານຮູບແບບຂອງຄວາມຮັບຮູ້ ແບບຕັກກະສາດ, ຜ່ານກົດເກນແລະທິດສະດີ, ກໍຄືຜ່ານຮູບແບບສິລະປະ. ຮູບແບບ ທີ່ຫນຶ່ງຂອງການສ່ອງແສງ ໃຊ້ສະເພາະແຕ່ໃນປັດຊະຍາ, ຮູບແບບທີ່ສອງ ໃຊ້ສະເພາະສິລະປະ.

ບົດບາດໃນສັງຄົມຂອງສະຕິສັງຄົມ ໃນຮູບແບບຕ່າງໆນັ້ນບໍ່ຄືກັນ. ເຊັ່ນ ສະຕິການເມືອງ ວາງຫນ້າທີ່ຂອງບັນດານັກການເມືອງ, ຊົນຊັ້ນ ແລະ ລັດ. ສະຕິກົດຫມາຍ ກຳນົດມາດຕະຖານກົດຫມາຍ ທີ່ຮັບໃຊ້ໃຫ້ແກ່ຜົນປະໂຫຍດ - ຂອງຊົນຊັ້ນປົກຄອງແລະດັດສົມການພົວພັນດ້ານເສດຖະກິດ ແລະ ດ້ານອື່ນໆ- ລະຫວ່າງຄົນ ບົນພື້ນຖານມາດຕະຖານກົດຫມາຍ.ບົດບາດຂອງສະຕິສິນທຳມັນ ແມ່ນສ້າງໃຫ້ຄົນມີຄຸນສົມບັດສິນທຳ ແລະ ເຮັດໃຫ້ການພົວພັນລະຫວ່າງ ພວກເຂົາເຈົ້າເປັນລະບຽບຮຽບຮ້ອຍ.

ໃນຍຸກສະໄຫມປະຫວັດສາດທີ່ແຕກຕ່າງກັນ ຮູບແບບຂອງສະຕິສັງຄົມແບບດຽວກັນ ເຄີຍມີບົດບາດທີ່ບໍ່ຄືກັນ. ເຊັ່ນໃນສະໄຫມກາງບູຮານ ຮູບແບບ ປົກຄອງຂອງສະຕິສັງຄົມ ແມ່ນສາສະຫນາ. ໃນສະໄຫມນັ້ນທຸກໆຮູບແບບຂອງສະຕິແບບອື່ນ, ເວົ້າສະເພາະຄືປັດຊະຍາ, ສະຕິສິນທຳ ແລະ ສິລະປະທັງນັ້ນ- ລ້ວນແຕ່ໄດ້ສະແດງຕົວອອກມາໃນເປືອກນອກຂອງສາສະຫນາ. ໃນເງື່ອນໄຂສັງຄົມສັງຄົມນິຍົມ ສາສະຫນາບໍ່ມີບົດບາດເກົ່າຂອງຕົນອີກ ແລະ ຕ້ອງຖືກບົດບັງໂດຍການສ່ອງແສງຄວາມເປັນຈິງ ແບບມີວິທະຍາສາດ. ໃນສັງຄົມສັງຄົມນິຍົມ ສະຕິການເມືອງແລະສິນທຳ ມີບົດບາດນຳຫນ້າ.

ທຸກໆຮູບແບບຂອງສະຕິສັງຄົມລ້ວນແຕ່ມີການກະທົບເຊິ່ງກັນແລະກັນ ຢ່າງແຫນ້ນແຟ້ນ. ພື້ນຖານຂອງການກະທົບເຊິ່ງກັນແລະກັນດັ່ງກ່າວນີ້ ແມ່ນ ການດຳລົງຄົງຕົວສັງຄົມ, ເຊິ່ງອາດສາມາດໄດ້ຮັບການສ່ອງແສງອອກມາໃນດ້ານການເມືອງ ແລະ ກົດຫມາຍ, ກໍຄືໃນດ້ານສິນທຳ ແລະ ສິລະປະທັງ ໃນລະດັບນີ້ ຫລື ລະດັບນັ້ນທີ່ແຕ່ລະຮູບແບບຂອງສະຕິສັງຄົມສົ່ງຜົນກະທົບໃສ່ຮູບແບບອື່ນໆ ແລະ ໄດ້ຮັບຜົນກະທົບຈາກຮູບແບບດັ່ງກ່າວ. ລັກສະນະຂອງການ ກະ

ທົບເຊິ່ງກັນແລະກັນນີ້ ຂຶ້ນກັບເງື່ອນໄຂຂອງການກະທົບດັ່ງກ່າວ.

## ສະຕິການເມືອງ.

ສະຕິການເມືອງສ່ອງແສງເຖິງຖານະ, ຜົນປະໂຫຍດ, ຈຸດປະສົງ ແລະ ໜ້າທີ່ຂອງບັນດາຊົນຊັ້ນ ແລະ ພັກການເມືອງຂອງຊົນຊັ້ນ. ມັນສ່ອງແສງ - ເຖິງການພົວພັນດ້ານການເມືອງທີ່ມີໃນສັງຄົມ ແລະ ການເຄື່ອນໄຫວຂອງບັນດາອົງການທາງການເມືອງ. ໃນຂະນະດຽວກັນນັ້ນ ກະໂຕການພົວພັນ ແລະ ການເຄື່ອນໄຫວຂອງບັນດາອົງການ ການເມືອງດັ່ງກ່າວ ແມ່ນຜະລິດຕະພັນ-ຂອງການພົວພັນດ້ານເສດຖະກິດ. ດັ່ງນີ້ ຖ້າບໍ່ເຂົ້າໃຈການພົວພັນລະຫວ່າງ-ເສດຖະກິດ ແລະ ການເມືອງໃຫ້ຖືກຕ້ອງແລ້ວ ກໍ່ບໍ່ອາດຈະໄຈ້ແຍກ ທາດແທ້ ຂອງສະຕິດ້ານການເມືອງ ແລະ ບົດບາດຂອງມັນໃນສັງຄົມໄດ້. ວ.ອິ. ເລ ນິນ ໄດ້ຂຽນວ່າ: "ການເມືອງແມ່ນການສະແດງຕົວຢ່າງລວມສູນຂອງ ເສດ ຖະກິດ..." [໑]. ດັ່ງນີ້ທ່ານໄດ້ເນັ້ນໜັກວ່າການເມືອງນັ້ນ ຂຶ້ນກັບເສດຖະ ກິດ, ຖ້າບໍ່ຄຳນຶງເຖິງເງື່ອນໄຂດ້ານເສດຖະກິດແລ້ວ ກໍ່ບໍ່ອາດຈະເວົ້າເຖິງ-ການເມືອງທີ່ຖືກຕ້ອງໄດ້. ແຕ່ໃນຂະນະດຽວກັນ ວ.ອິ.ເລນິນ ໄດ້ຊີ້ແຈງວ່າ "ຖ້າຫາກບໍ່ມີທັດສະນະການເມືອງທີ່ຖືກຕ້ອງຕໍ່ບັນຫາແລ້ວ, ຊົນຊັ້ນກ່ຽວຂ້ອງກໍ່ ບໍ່ສາມາດຮັກສາການປົກຄອງຂອງຕົນ, ດັ່ງນັ້ນຈຶ່ງບໍ່ສາມາດຈະແກ້ໄຂ ໜ້າທີ່ ການຜະລິດຂອງຕົນ" [໒].

ສະຕິການເມືອງສະແດງໃຫ້ເຫັນເຖິງ ຊີວິດການເມືອງຂອງສັງຄົມ, ເວ ລາໃດມັນກໍ່ມີລັກສະນະຊົນຊັ້ນ. ເຊັ່ນ ແນວຄິດການເມືອງຂອງນາຍທຶນ ມີລັກ ສະນະປະຕິການ. ມັນແມ່ນໃສ່ເພື່ອປົກປັກຮັກສາລະບົບທຶນນິຍົມ ທີ່ໄດ້ພົ້ນ ສະ ໄໝໄປແລ້ວ, ເພື່ອສ້າງພົນຖານໃຫ້ແກ່ລະບອບຄົນຂູດຮີດຄົນ ເພື່ອໃສ່ຮ້າຍ-ປ້າຍສີຜົນສຳເລັດ ຂອງສັງຄົມນິຍົມ, ຂອງຂະບວນການກອມມູນິດ, ກຳມະ

---

໑) ວ.ອິ.ເລນິນ, ບົດນິພົນຄົບຊຸດ, ເຫລັ້ມ ໔໒, ໜ້າ ໒໗໘.

໒) ວ.ອິ.ເລນິນ, ບົດນິພົນຄົບຊຸດ, ເຫລັ້ມ ໔໒, ໜ້າ ໑໗໙.

ກອນ ແລະ ປົດປ່ອຍຊາດ. ພ້ອມກັນນັ້ນນາຍທຶນບໍ່ປະລະການໃສ່ຮ້າຍ ປ້າຍສີຢ່າງເປີດແປນຕໍ່ຊົນຊັ້ນກຳມະກອນ, ຕໍ່ພັກຂອງເຂົາເຈົ້າ, ຕໍ່ແນວຄິດສັງຄົມນິຍົມ.

ແນວຄິດການເມືອງຊົນຊັ້ນກຳມະກອນ ຝືນກັບແນວຄິດການເມືອງນາຍທຶນ ແນວຄິດຊົນຊັ້ນກຳມະກອນມີລັກສະນະປະຕິວັດ, ກ້າວໜ້າ, ມີມະນຸດສະທຳ, ຮັກຊາດແລະສາກົນນິຍົມ. ໃນບັນດາປະເທດທຶນນິຍົມແນວຄິດນີ້ ສາມັກຄີທ້ອນໂຮມມະຫາຊົນຊາວຜູ້ອອກແຮງງານເປັນລ້ານໆ ແລະ ປຸກລະດົມພວກເຂົາ - ເຈົ້າເຂົ້າຮ່ວມໃນການຕໍ່ສູ້ ຕ້ານການໜີບຕົວຂອງທຶນຜູກຂາດ, ເພື່ອ ສັນຕິພາບ, ຄວາມເປັນເອກະລາດແຫ່ງຊາດ, ປະຊາທິປະໄຕແລະສັງຄົມນິຍົມ . ໃນບັນດາປະເທດສັງຄົມນິຍົມ ແນວຄິດການເມືອງເປັນຄືກຳລັງປະດິດສ້າງ ທີ່ເຂັ້ມແຂງແຮງກ້າ ໃນການກໍ່ສ້າງສັງຄົມໃໝ່. ອັນນັ້ນກໍ່ຍ້ອນວ່າ ແນວຄິດ-ການເມືອງໃນປະເທດດັ່ງກ່າວ ມີລັກສະນະຕໍ່ໄປນີ້: ມີເນື້ອໃນວິທະຍາ - ສາດຢ່າງແທ້ຈິງ, ສະເໝີຕົ້ນສະເໝີປາຍ ແລະ ມີລັກສະນະຫລັກການ ທີ່ເຂັ້ມງວດ, ມີລັກສະນະປະຊາຊົນຢ່າງແທ້ຈິງ ແລະ ມີທາດແທ້ສາກົນນິຍົມ . ລັດທິສາກົນກຳມາຊີບ ແລະ ສັງຄົມນິຍົມ ເປັນຄືໜຶ່ງໃນບັນດາຫລັກການທາງການເມືອງຕົ້ນຕໍ ຂອງນະໂຍບາຍການເມືອງ ຂອງບັນດາພັກກອມມູນິດ ທີ່ໄດ້ສະແດງອອກໃນການເສີມຂະຫຍາຍການພົວພັນຮ່ວມມືແບບອ້າຍນ້ອງແລະການຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງປະຊາຊົນບັນດາປະເທດໃນວົງຄະນາ - ຍາດສັງຄົມນິຍົມ, ໃນການສະໜັບສະໜູນຢ່າງຕັ້ງໜ້າຕໍ່ຂະບວນການກອມມູນິດ ແລະ ກຳມະກອນໃນທົ່ວໂລກ, ໃນການຊ່ວຍເຫລືອທີ່ບໍ່ຄິດຄ່າຕອບແທນ-ແກ່ບັນດາປະຊາຊົນ ໃນການຕໍ່ສູ້ຂອງພວກເຂົາເຈົ້າ ເພື່ອຄວາມເປັນເອກະ-ລາດແຫ່ງຊາດ, ຕ້ານເສດເຫລືອຂອງລັດທິລ່າເມືອງຂຶ້ນ ແລະ ລັດທິຈຳແນກເຊື້ອຊາດ.

ໂດຍສອດຄ່ອງກັບແນວຄິດການເມືອງຂອງຕົນ ບັນດາພັກກອມມູນິດ ແລະ ພັກກຳມະກອນໃນບັນດາປະເທດສັງຄົມນິຍົມ ປະຕິບັດການນຳພາດ້ານແນວຄິດການເມືອງ ໃນທຸກໆດ້ານແຫ່ງຊີວິດຂອງສັງຄົມ, ຊີ້ນຳການເຄື່ອນໄຫວ ຂອງຊາວຜູ້ອອກແຮງງານ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານວັດຖຸການເມືອງ, ສັງຄົມ ແລະ ວັດທະນະທຳຂອງພວກເຂົາເຈົ້າ, ເພື່ອຮັບປະກັນສົມ

ຕິພາບແລະ ຄວາມປອດໄພຂອງບັນດາປະຊາຊົນ.

ການໂຄສະນາແນວຄິດການເມືອງ, ການກໍ່ສ້າງສະຕິການເມືອງ ໃຫ້ແກ່ ຊາວຜູ້ອອກແຮງງານດ້ວຍວິທີການປັບປຸງທົ່ວທັງວຽກງານແນວຄິດ, ອົບຮົມ - ການເມືອງ, ປັບປຸງທຸກໆຂອດຂອງການຂ່າວສານມວນຊົນ, ການສຶກສາ, ການ ອົບຮົມການເມືອງ, ອົງການວັດທະນະທຳນັ້ນ ແມ່ນອົງເຂດວຽກງານສຳຄັນທີ່ ສຸດຂອງບັນດາພັກກອມມູນິດ ແລະ ພັກກຳມະກອນ.

## ສະຕິກົດຫມາຍ

ສະຕິກົດຫມາຍມີການພົວພັນຢ່າງແຫນ້ນແຟ້ນ ກັບສະຕິການເມືອງ. ທັງ ສອງຮູບແບບຂອງສະຕິສັງຄົມນີ້ໃກ້ຊິດກວ່າຫມູ່ກັບໂຄງລ່າງເສດຖະກິດຂອງສັງ ຄົມ ແລະ ພົວພັນກັບມັນຢ່າງແຫນ້ນແຟ້ນກວ່າສະຕິສິລະປະທັດ ແລະ ສາສະ ຫນາ. ໃນເມື່ອໂຄງລ່າງເສດຖະກິດຂອງສັງຄົມຫາກມີການປ່ຽນແປງແລ້ວທັດ ສະນະການເມືອງ ແລະ ກົດຫມາຍຂອງຄົນກໍ່ຈະປ່ຽນແປງໄວກວ່າທັດສະນະ- ອື່ນໆ. ຈຳພວກທີ່ຫນຶ່ງສົ່ງຜົນກະທົບຕໍ່ແນວຄິດທີ່ມີລັກສະນະຕັດສິນຊີ້ຂາດ ຕໍ່ຈຳ ພວກທີ່ສອງ.

ສະຕິກົດຫມາຍສ່ອງແສງອອກໃນຄວາມຮູ້ສຶກ, ໃນຄວາມຄິດຄວາມ ເຫັນ ໃນແນວຄິດ ແລະ ທິດສະດີກ່ຽວກັບການພົວພັນຂອງຄົນຕໍ່ສິດທິຕາມກົດຫມາຍ, ກົດຫມາຍ, ຄວາມຍຸດຕິທຳ, ກ່ຽວກັບຄວາມສຳນຶກຂອງພວກເຂົາເຈົ້າ ວ່າ ແມ່ນຫຍັງຖືກຕ້ອງຕາມກົດຫມາຍ ແລະ ແມ່ນຫຍັງບໍ່ຖືກຕ້ອງຕາມກົດຫມາຍ. ມີ ຄວາມຈຳເປັນຕ້ອງຈຳແນກສະຕິກົດຫມາຍກັບມາດຕະຖານກົດຫມາຍທີ່ລັດ ໄດ້ ຮັບຮອງເອົາ. ພົນລະເມືອງຂອງລັດສາມາດເຫັນພ້ອມນຳມາດຕະຖານ ກົດ ຫມາຍທີ່ສອດຄ່ອງກັບຜົນປະໂຫຍດຂອງພວກເຂົາເຈົ້າ, ຫລືປະຕິເສດມັນ ຖ້າ ຫາກມາດຕະຖານດັ່ງກ່າວລະເມີດຜົນປະໂຫຍດຂອງພວກເຂົາເຈົ້າ. ດ້ວຍເຫດ ນີ້ ຈຶ່ງຄວນໄຈ້ແຍກການພົວພັນທາງດ້ານກົດຫມາຍ, ທີ່ໄດ້ຮັບການຈັດແຈງ - ເປັນລະບຽບຮຽບຮ້ອຍດ້ວຍມາດຕະຖານກົດຫມາຍ ເຊິ່ງແມ່ນລັດເປັນຜູ້ກຳນົດ ໄວ້ນັ້ນ, ກັບສະຕິກົດຫມາຍ ທີ່ໄດ້ສະແດງເຖິງການພົວພັນຂອງຄົນກັບມາດຕະ

ຖານກົດໝາຍດັ່ງກ່າວ.

ກົດໝາຍ ແມ່ນການກຳນົດການພົວພັນດ້ານເສດຖະກິດຢ່າງເປັນລາຍລັກອັກສອນທີ່ຖືກຕ້ອງຕາມຫລັກການ. ຕາມຄຳນິຍາມຂອງ ກ.ມາກ ແລ້ວ ມັນແມ່ນເຈດຈຳນົງຂອງຊົນຊັ້ນປົກຄອງທີ່ໄດ້ປະກາດເປັນກົດໝາຍ ແລະກ່ອນອື່ນໝົດສະແດງເຖິງການພົວພັນຂອງບັນດາຊົນຊັ້ນຕໍ່ພາຫະນະການຜະລິດ. ກົດໝາຍແມ່ນແກ່ນສານຂອງໂຄງປົກຝ່າຍຕຸລາການ ທີ່ກຳນົດການພົວພັນຢ່າງຖືກຕ້ອງຕາມກົດໝາຍລະຫວ່າງຄົນໃນສັງຄົມໂດຍຜ່ານບັນດາສະຖາບັນແລະ ອົງການນິຕິບັນຍັດ. ສະຕິກົດໝາຍສ່ອງແສງເຖິງສາຍພົວພັນທາງກົດໝາຍ ດັ່ງກ່າວນັ້ນ ແລະ ການເຄື່ອນໄຫວຂອງອົງການຕຸລາການອີກດ້ວຍ. ມັນແມ່ນການສ່ອງແສງເຖິງຖານະຂອງບັນດາຊົນຊັ້ນຢູ່ໃນສັງຄົມ. ມັນເກີດຂຶ້ນມາແລະ ຄົງຢູ່ພຽງແຕ່ໃນສັງຄົມທີ່ມີຊົນຊັ້ນເທົ່ານັ້ນ ແລະ ມີລັກສະນະຊົນຊັ້ນ.

ແຕ່ລະລັດອາດມີພຽງແຕ່ລະບົບກົດໝາຍດຽວເທົ່ານັ້ນ ແຕ່ໃນສັງຄົມ ທີ່ມີຄວາມເປັນປໍລະປັກກັນລະຫວ່າງຊົນຊັ້ນ ບໍ່ອາດຈະມີສະຕິກົດໝາຍທີ່ ເອກະພາບ. ໃນສັງຄົມນາຍທຶນພວກນາຍທຶນໄດ້ສ້າງຕັ້ງກົດໝາຍຂຶ້ນມາເພື່ອປົກປັກຮັກສາອະພິສິດຂອງຕົນ. ຟ.ອັງແກນໄດ້ຂຽນວ່າ ໃນເງື່ອນໄຂທຶນນິຍົມ"ຊາວກຳມະກອນບໍ່ຮັບຮູ້ກົດໝາຍຫາກພຽງແຕ່ຕ້ອງປະຕິບັດຕາມກົດໝາຍ ໃນເມື່ອພວກເຂົາເຈົ້າບໍ່ສາມາດຈະປ່ຽນແປງມັນໄດ້ເທົ່ານັ້ນ"[1]. ໃນຂະບວນ ການກຳມະກອນຄວາມຮັບຮູ້ກ່ຽວກັບຄວາມບໍ່ເປັນທຳຂອງສັງຄົມທຶນນິຍົມນັ້ນ ເຕີບໃຫຍ່ຂະຫຍາຍຕົວຢ່າງເປັນປະຈຳ. ສະຕິກົດໝາຍຂອງຊາວຜູ້ອອກແຮງງານອັດແຍ່ງຢ່າງເປັນປໍລະປັກກັນກັບສະຕິກົດໝາຍຂອງນາຍທຶນ.

ສະຕິກົດໝາຍຂອງສັງຄົມນິຍົມແຕກຕ່າງກັນກັບຂອງນາຍທຶນໃນດ້ານຮາກຖານ, ເພາະວ່າມັນເປັນຕົວແທນ ໃຫ້ແກ່ຜົນປະໂຫຍດຮາກຖານຂອງ ຊົນຊັ້ນກຳມະກອນ, ຂອງຊາວຜູ້ອອກແຮງງານທຸກຄົນ. ເປັນຄັ້ງທຳອິດໃນ ປະຫວັດສາດທີ່ໃນລັດສັງຄົມນິຍົມໄດ້ມີການສ້າງຕັ້ງສະຕິກົດໝາຍທີ່ເອກະພາບ, ທີ່ສະແດງເຖິງເຈດຈຳນົງຂອງພົນລະເມືອງທຸກຄົນຢ່າງທົ່ວເຖິງ. ບັນດາແນວຄິດພື້ນຖານຂອງສະຕິກົດໝາຍຂອງສັງຄົມນິຍົມແມ່ນ: ລັກສະນະກົດໝາຍ ແລະ

---

໑) ກ.ມາກ ແລະ ຟ.ອັງແກນ ບົດນິພົນ,ເຫລັ້ມ ໒, ໜ້າ ໔໕໑.

ຄວາມເປັນທຳ, ຄວາມເຄົາລົບຕໍ່ແຮງງານ ແລະ ກຳມະສິດຂອງສັງຄົມ,ອຳນາດການປົກຄອງຂອງປວງຊົນ ແລະ ລັດທິປະຊາທິປະໄຕທີ່ສະເໝີຕົ້ນ ສະເໝີປາຍ, ການເສີມຂະຫຍາຍສິດທິ ແລະ ສິດເສລີພາບທີ່ຕິດພັນຢ່າງບໍ່ຂາດສາຍກັບບັນດາພາລະໜ້າທີ່.

ໃນບັນດາຮູບຖານຈັດຕັ້ງທີ່ມີຄວາມເປັນປໍລະປັກກັນ ຊົນຊັ້ນປົກຄອງບັງຄັບໃຫ້ຊາວຜູ້ອອກແຮງງານຕ້ອງຮັບຮູ້ກົດໝາຍຂອງຕົນ ແລະ ກົດໝາຍນີ້ຝືນກັບຄວາມມຸ່ງມາດປາຖະໜາຂອງຊາວຜູ້ອອກແຮງງານ, ສ່ວນກົດໝາຍສັງຄົມນິຍົມສະແດງເຖິງເຈດຈຳນົງຂອງປະຊາຊົນ, ມີອິດທິພົນຢ່າງໃຫຍ່ຫລວງ,ມີກຳລັງແຮງໃນການຈູງໃຈ, ແລະ ເປັນພາຫະນະທີ່ເຂັ້ມແຂງແຮງກ້າໃນການອົບຮົມກໍ່ສ້າງສະຕິກົດໝາຍຂອງສັງຄົມນິຍົມ.

ການເສີມຂະຫຍາຍສະຕິກົດໝາຍຂອງສັງຄົມນິຍົມ ນຳໄປເຖິງເລື່ອງ ທີ່ວ່າ ເນື່ອງຈາກມີສະຕິສິນທຳ ຂອງຄົນແລ້ວ ບັນດາມາດຕະຖານກົດໝາຍຈະຢຸດເຊົາເປັນສິ່ງທີ່ຈຳເປັນອີກເມື່ອສ້າງຕັ້ງລະບອບກອມມູນິດນິຍົມແລ້ວ, ເມື່ອບັນລຸສິດສະເໝີພາບດ້ານສັງຄົມຢ່າງສົມບູນແລ້ວ, ກົດໝາຍ,ການພົວພັນທາງກົດໝາຍ ແລະ ອົງການກົດໝາຍ, ພ້ອມທັງທັດສະນະ ແລະ ແນວຄິດກ່ຽວກັບກົດໝາຍນັ້ນ ກໍ່ຈະສູນຫາຍໄປ. ສິ່ງກຳນົດລະບຽບການພົວພັນລະຫວ່າງຄົນ ແລະ ການກະທຳຂອງພວກເຂົາເຈົ້າຈະແມ່ນມາດຕະຖານຈູນສົມບັດແລະສະຕິສິນທຳ.

## ສະຕິສິນທຳ ແລະຈູນສົມບັດ

ສະຕິສິນທຳ ແມ່ນການສ່ອງແສງເຖິງການພົວພັນດ້ານສິນທຳລະຫວ່າງຄົນທີ່ເກີດຂຶ້ນມາດ້ວຍການດຳລົງຊີວິດສັງຄົມຂອງພວກເຂົາເຈົ້າໃນຄວາມຮູ້ສຶກ, ແນວຄິດ, ຄວາມຄິດ, ແລະ ທັດສະດີ. ຟ.ອັງແກນ ໄດ້ຂຽນວ່າ:"...ໃນທີ່ສຸດທ້າຍຄົນໄດ້ຖອດເອົາທັດສະນະສິນທຳໂດຍເຈດຕະນາຫລືໂດຍບໍ່ເຈດຕະນາຈາກການພົວພັນຕົວຈິງເຊິ່ງກຳນົດຖານະຊົນຊັ້ນຂອງພວກເຂົາເຈົ້າ,ໝາຍຄວາມວ່າ ຖອດເອົາມາຈາກການພົວພັນ ດ້ານເສດຖະກິດ ເຊິ່ງໃນນັ້ນໄດ້ດຳ

ເນີນການຜະລິດ ແລະ ການແຈກຢາຍ "໑). ດັ່ງນັ້ນບໍ່ແມ່ນປັດໄຈຊີວະສາດ ແລະ ບໍ່ແມ່ນປັດໄຈຂອງພະເຈົ້າ ນອນຢູ່ໃນພື້ນຖານທີ່ພາໃຫ້ເກີດມີສິນທຳແລະ ສະຕິສິນທຳ, ຫາກແມ່ນເງື່ອນໄຂດ້ານສັງຄົມຂອງຊີວິດການເປັນຢູ່ ຂອງຄົນ, ເຊິ່ງໃນນັ້ນ ແຮງງານ, ການພົວພັນດ້ານສັງຄົມ, ຈິນຕະນາການ ແລະ ພາສາປາກເວົ້າເປັນສິ່ງສຳຄັນທີ່ສຸດ. ສະຕິສິນທຳ ແມ່ນຮູບແບບເກົ່າແກ່ ທີ່ສຸດຂອງສະຕິສັງຄົມ. ສະຕິສິນທຳ ໄດ້ສັງລວມເອົາຄວາມຮັບຮູ້ຂອງຄົນຕໍ່ ລັກສະນະ ແລະ ຮູບແບບການປະພຶດຕົວຂອງຄົນໃນສັງຄົມ, ການພົວພັນຂອງຄົນກັບຄົນຜູ້ອື່ນ. ການເຄື່ອນໄຫວຂອງຄົນແຕ່ລະດ້ານ ( ດ້ານການອອກແຮງງານ, ສັງຄົມ-ການເມືອງ, ຈິດໃຈ, ການປະພຶດຕົວ ) ລ້ວນແຕ່ມີສີສັນຂອງສິນທຳ.

ມາດຕະຖານສິນທຳກໍ່ຄືກັນກັບມາດຕະຖານກົດໝາຍ ເຮັດໃຫ້ການພົວພັນລະຫວ່າງຄົນເປັນລະບຽບຮຽບຮ້ອຍ. ແຕ່ຖ້າຫາກມາດຕະຖານກົດໝາຍແມ່ນລັດເປັນຜູ້ສ້າງຕັ້ງຂຶ້ນມາ ແລະ ມີພົນບັງຄັບດ້ານກົດໝາຍແລ້ວ, ແມນວາມາດຕະຖານຄຸນສົມບັດໄດ້ສ້າງຂຶ້ນມາ ແລະ ປົກປັກຮັກສາດ້ວຍອິດທິພົນຂອງມະຫາຊົນ.

ມາດຕະຖານພື້ນຖານຂອງສິນທຳ ແມ່ນຄວາມຮູ້ກ່ຽວກັບຄວາມດີ ແລະ ຄວາມຊົ່ວ, ຄວາມເປັນທຳ, ພາລະໜ້າທີ່, ມະໂນທຳ, ກຽດສັກສີ, ຄວາມສຸກ ແລະ ອື່ນໆ. ມາດຕະຖານດັ່ງກ່າວມີລັກສະນະປະຫວັດສາດຕົວຈິງ ແລະ ແມ່ນສັງຄົມເປັນຜູ້ກຳນົດລັກສະນະດັ່ງກ່າວ. ເຊັ່ນຕົວຢ່າງ ສິ່ງທີ່ໃນເງື່ອນໄຂປະຫວັດສາດໜຶ່ງຖືກັນເປັນຄວາມດີນັ້ນ ສາມາດຈະເປັນຄວາມຊົ່ວ ໃນເງື່ອນໄຂອື່ນ. ອັງແກນ ໄດ້ຊີ້ແຈງວ່າ ການສຳນຶກກ່ຽວກັບຄວາມດີ ແລະຄວາມຊົ່ວ "ແຕກຕ່າງກັນລະຫວ່າງປະຊາຊົນຊາດໜຶ່ງກັບ ປະຊາຊົນອີກຊາດໜຶ່ງ, ແຕກຕ່າງກັນລະຫວ່າງສະຕະວັດໜຶ່ງ ກັບອີກສະຕະວັດໜຶ່ງຢ່າງຂາດຕົ້ນ ຈົນກາຍເປັນສິ່ງກົງກັນຂ້າມກັນໂດຍກົງ"໒). ວ.ອີ.ເລນິນ ໄດ້ຂຽນວ່າ:"...ສິ່ງທີ່ເປັນຄວາມຮ້າຍກາດສຳລັບຊາວກຳມາຊີບນັ້ນ ພວກອິດສະຫລະເສລີຮຽກເປັນຄຸນຄວາມດີ, ຄວາມສົມບູນພູນສຸກ, ຜົນປະໂຫຍດ, ຄວາມຊື່ສັດສຸດຈະ ຫລິດ

---

໑) ກ.ມາກ ແລະ ຟ.ອັງແກນ. ນິພົນ, ເຫລັ້ມ ໒໐, ໜ້າ ໘໕.

໒) ກ.ມາກ ແລະ ຟ.ອັງແກນ. ນິພົນ, ເຫລັ້ມ ໒໐, ໜ້າ ໘໔.

ຈົນກະທັ້ງອາດຮຽກເປັນສິ່ງສັກກາລະບູຊາ..."[1].

ໃນສະໄໝປະຈຸບັນນີ້ ຄວາມດີ ແມ່ນທຸກສິ່ງທີ່ອຳນວຍເງື່ອນໄຂ ສະດວກໃຫ້ແກ່ການປົດປ່ອຍຊາວຜູ້ອອກແຮງງານອອກຈາກການຂູດຮີດ, ອອກ ຈາກການກົດຂີ່ໜີບຕົງ ດ້ານເສດຖະກິດ, ການເມືອງ ແລະ ຈິດໃຈ, ແມ່ນສິ່ງທີ່ຮັບໃຊ້ໃຫ້ແກ່ຄວາມກ້າວໜ້າ ແລະ ພາລະກິດໄຊຊະນະຂອງລັດທິກອມມູນິດນິຍົມ. ທຸກສິ່ງທີ່ຊ່ວຍຊູຍູ້ໜູນແອກຄອບຄອງຈົນຊາດ ແລະ ແອກລ່າເມືອງຂຶ້ນທີ່ຮັບໃຊ້ເພື່ອປົກປັກຮັກສາການກົດຂີ່ຂູດຮີດ, ຖ່ວງດຶງວິວັດທະນາການ ຂອງມວນມະນຸດບົນເສັ້ນທາງກ້າວຂຶ້ນສູ່ກອມມູນິດນິຍົມນັ້ນ ລ້ວນແຕ່ແມ່ນຄວາມຊົ່ວ.

ໂດຍແຕກຕ່າງກັບຄວາມດີ ແລະ ຄວາມຊົ່ວ ຊຶ່ງຕາມຫລັກການແລ້ວ ຕີລາຄາປະກົດການສະເພາະແຕ່ໃຜມັນນັ້ນ,ມາດຕະເກນຄວາມເປັນທຳຕີລາຄາການພົວພັນຂອງຫລາຍປະກົດການໃນທັດສະນະຄວາມດີ ແລະ ຄວາມຊົ່ວ ທີ່ມີແລ້ວ. ຄວາມຮູ້ກ່ຽວກັບຄວາມເປັນທຳ ບໍ່ພຽງແຕ່ແມ່ນຄວາມຮູ້ຂອງສະຕິ ສິນທຳເທົ່ານັ້ນ, ແຕ່ຍັງແມ່ນຄວາມຮູ້ຂອງສະຕິການເມືອງ ແລະ ກົດໝາຍ . ຄວາມຮູ້ແບບສັງຄົມນິຍົມກ່ຽວກັບຄວາມເປັນທຳ ກອມລວມເອົາສິດ ສະເໝີພາບຂອງຄົນຕໍ່ພາຫະນະການຜະລິດ, ພ້ອມທັງສິດສະເໝີພາບດ້ານ ການເມືອງ ແລະ ກົດໝາຍ ລະຫວ່າງພວກເຂົາເຈົ້າ.

ໃນມາດຕະເກນ ພາລະໜ້າທີ່ໄດ້ສ່ອງແສງເຖິງຄວາມຮຽກຮ້ອງຂອງສັງຄົມຫລືຈຸ້ມຈຸ້ມຕໍ່ການປະພຶດຕົວຂອງກຸ່ມຄົນໃນສັງຄົມ, ຕໍ່ໝູ່ຄະນະແລະສ່ວນບຸກຄົນ. ເນື້ອໃນຂອງພາລະໜ້າທີ່ດ້ານສິນທຳ ແມ່ນການສັງລວມພັນທະດ້ານສິນທຳ ຂອງກຸ່ມຄົນໃນສັງຄົມ ຫລືສ່ວນບຸກຄົນຕໍ່ໜ້າສັງຄົມ, ປະຊາຊົນ, ຈົນຈຸ້ນ, ຄອບຄົວ, ເພື່ອນສະຫາຍ.

ຖານະພິເສດໃນສິນທຳໄດ້ແກ່ມະໂນທຳ, ໝາຍຄວາມວ່າແມ່ນຄວາມສາມາດຂອງຄົນໃນການກຳນົດກົດລະບຽບສິນທຳສຳລັບຕົນເອງ, ຈຳໃຫ້ຕົນຕ້ອງປະຕິບັດຕາມກົດລະບຽບດັ່ງກ່າວ ແລະ ຕີລາຄາການກະທຳຂອງຕົນ. ການຕີລາຄາດ້ວຍຕົນເອງດັ່ງນີ້ ກະທຳໄປໂດຍບຸກຄົນສົມທຽບຈຸດປະສົງ ແລະ ການກະທຳຂອງຕົນກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ.ມະໂນທຳແມ່ນ ສຽງ

---

1) ວ.ອີ.ເລນິນ. ບົດນິພົນຄົບຊຸດ,ເຫລັ້ມ ໔໕, ໜ້າ ໓໑໑.

ພາຍໃນທີ່ປຸກລະດົມໃຫ້ຄົນຕ້ອງເອົາຜົນປະໂຫຍດສ່ວນຕົວຂຶ້ນກັບຜົນ ປະໂຫຍດສ່ວນລວມ. ມະໂນທຳຂອງຄົນ ແມ່ນສັງຄົມເປັນຜູ້ກຳນົດໄວ້. ຄວາມເຂົ້າໃຈກ່ຽວກັບມະໂນທຳຂອງກຸ່ມຄົນ ທີ່ແຕກຕ່າງກັນ ໃນສັງຄົມນັ້ນ ຍ່ອມບໍ່ຄືກັນ.

ຄວາມຮູ້ກ່ຽວກັບກຽດ ສັກສີ ສະແດງເຖິງຄວາມຮັບຮູ້ຂອງຄົນ ຕໍ່ຄວາມໝາຍດ້ານສັງຄົມຂອງຕົນ ແລະ ການທີ່ສັງຄົມຮັບຮູ້ຄວາມໝາຍດັ່ງກ່າວຕາມເນື້ອໃນ ແລະ ທາດແທ້ຂອງການພົວພັນດ້ານສິນທຳ ທີ່ໄດ້ສ່ອງແສງ ໃນນັ້ນຄວາມຮູ້ກ່ຽວກັບກຽດສັກສີຄ້າຍຄືກັນກັບຄວາມຮູ້ກ່ຽວກັບຄຸນຄວາມດີ. ຄວາມຮູ້ສຶກນຶກກຽດ ສັກສີ ແລະ ຄຸນຄວາມດີຮຽກຮ້ອງໃຫ້ຄົນຕ້ອງຮັກສາຊື່ສຽງ, ອິດທິພົນ, ຄຸນງາມຄວາມດີ ແລະ ອື່ນໆຂອງຕົນ ຕໍ່ໜ້າທາງສຽງມະຫາຊົນ.

ບົນພື້ນຖານແຫ່ງສະຕິສິນທຳ ຄົນໄດ້ສ້າງອຸດົມຄະຕິທາງດ້ານຄຸນສົມບັດ - ຂອງຕົນຂຶ້ນມາ. ອຸດົມຄະຕິນີ້ ມີຄວາມແຕກຕ່າງກັນສຳລັບກຸ່ມຄົນ ໃນສັງຄົມ ແລະ ຊົນຊັ້ນທີ່ແຕກຕ່າງກັນ. ສຳລັບຊົນຊັ້ນ ແລະ ກຸ່ມຄົນທີ່ກ້າວໜ້າ ແມ່ນອຸດົມຄະຕິທີ່ສູງສົ່ງ, ສຳລັບຊົນຊັ້ນ ແລະ ກຸ່ມຄົນທີ່ເປັນປະຕິການ ແມ່ນອຸດົມຄະຕິທີ່ຕ່ຳຊ້າ. ອຸດົມຄະຕິທາງດ້ານຄຸນສົມບັດທີ່ກ້າວໜ້າທີ່ສຸດໃນຍຸກນີ້ ແມ່ນອຸ-ດົມຄະຕິກອມມູນິດນິຍົມ. ມັນຊີ້ແຈງໃຫ້ຄົນເຫັນຄວາມໝາຍສູງສຸດ ຂອງການເຄື່ອນໄຫວ ແລະ ບົດບາດ ປຸກລະດົມ ແລະ ດັດສ້າງທີ່ໃຫຍ່ຫລວງ ໃນການຮັດແໜ້ນພື້ນຖານສິນທຳອັນສູງສົ່ງຂອງສັງຄົມ.

ສິນທຳໃນຖານະເປັນຜະລິດຕະພັນຂອງວິວັດທະນາການ ທາງປະຫວັດ - ສາດ ຂຶ້ນກັບສະພາບການເສດຖະກິດ ທີ່ແນ່ນອນຂອງສັງຄົມ. ຟ.ອັງແກນໄດ້ຂຽນວ່າ: "ຍ້ອນວ່າຈົນເຖິງປະຈຸບັນນີ້ ສັງຄົມຍັງເຄື່ອນເໜັງໃນຄວາມ ກົງກັນຂ້າມດ້ານຊົນຊັ້ນຢູ່, ສະນັ້ນ ເວລາໃດສິນທຳກໍແມ່ນສິນທຳຂອງຊົນຊັ້ນ.ສິນທຳພິສູດຄວາມມີເຫດຜົນຂອງການປົກຄອງ ແລະ ຜົນປະໂຫຍດຂອງຊົນຊັ້ນປົກຄອງ, ຫລືວ່າໃນເມື່ອຊົນຊັ້ນທີ່ຖືກກົດຂີ່ຫາກມີກຳລັງແຮງພຽງພໍແລ້ວ, ສິນທຳສະແດງເຖິງຄວາມຄຽດແຄ້ນຕໍ່ການປົກຄອງດັ່ງກ່າວ ແລະ ເປັນຕົວແທນ ໃຫ້ແກ່ຜົນປະໂຫຍດໃນອະນາຄົດຂອງຜູ້ທີ່ຖືກກົດຂີ່ເອງ...ສິນທຳຢູ່ນອກເໜືອຄວາມກົງກັນຂ້າມດ້ານຊົນຊັ້ນ,ສິນທຳທີ່ມີມະນຸດສະທຳທີ່ແທ້ຈິງຈະເປັນໄປໄດ້ກໍແຕ່ໃນເມື່ອສັງຄົມຫາກຂະຫຍາຍຕົວເຖິງໄລຍະທີ່ບໍ່ພຽງແຕ່ໄດ້ລົບລ້າງ ລັກສະນະກົງກັນຂ້າມກັນ ລະຫວ່າງຊົນຊັ້ນເທົ່ານັ້ນ, ແຕ່ຍັງຕ້ອງປັດເປົ່າ ລັກສະນະ

ກົງກັນຂ້າມດັ່ງກ່າວນີ້ໃນພຶດຕິກຳຕົວຈິງອີກພ້ອມ"[1].

ຮູບແບບທີ່ໜຶ່ງຂອງສິນທຳຊົນຊັ້ນ ແມ່ນສິນທຳຂອງສັງຄົມຂ້າທາດ, ບ່ອນທີ່ສິນທຳຂອງພວກເຈົ້າທາດທີ່ຖືຂ້າທາດເປັນສິ່ງຂອງ, ເປັນອາວຸດປາກເວົ້າເປັນນັ້ນ ແມ່ນສິນທຳທີ່ມີຖານະຄອບຄອງ. ຄວາມບໍ່ເປັນທຳ, ການກະທຳຮຸນແຮງທຸກໆປະການຕໍ່ຂ້າທາດ, ຈົນກະທັ້ງການເຂັ່ນຂ້າພວກເຂົາເຈົ້ານັ້ນຖືເປັນສິ່ງທີ່ຍອມຮັບກັນໄດ້.

ສິນທຳຂອງພວກສັກດີນາ ເຖິງແມ່ນວ່າຈະຖືຊາວນາທີ່ເປັນທາດນັ້ນ ເປັນຄົນກໍ່ຕາມ, ແຕ່ແມ່ນຄົນປະເພດຕ່ຳ, ແມ່ນ "ກະດູກດຳ", ສ່ວນຕົວແທນຂອງຊົນຊັ້ນປົກຄອງແມ່ນ "ກະດູກຂາວ". ສິນທຳສັກດີນາໄດ້ປົກປິດ ແລະ ພິສູດຄວາມມີເຫດຜົນຂອງການທີ່ເຈົ້າທີ່ດິນກົດຂີ່ຂົ່ມເຫັງຊາວນາຢ່າງໂຫດຮ້າຍ, ປົກປັກຮູບແບບການກົດຂີ່ຂູດຮີດຂອງສັກດີນາ. ຫາກແຕ່ຊາວນາທີ່ຖືກກົດຂີ່ຂົ່ມເຫັງໄດ້ກໍ່ສ້າງຈິດສຳນຶກຂອງຕົນກ່ຽວກັບສິນທຳ. ອຸດົມຄະຕິສິນທຳຂອງຊາວນາແມ່ນຄົນທີ່ລຸກຂຶ້ນຕ້ານການຂົ່ມເຫັງຂອງເຈົ້າສັກດີນາ.

ພ້ອມກັບການກຳເນີດຂອງລັດທິທຶນນິຍົມ ໄດ້ເກີດມີສິນທຳຂອງ ນາຍທຶນ ແລະ ຊົນຊັ້ນກຳມາຊີບ. ໃນເບື້ອງຕົ້ນ ນາຍທຶນໄດ້ດຳເນີນການຕໍ່ສູ້ຕ້ານ ຊຸນນາງສັກດີນາ ພາຍໃຕ້ຄຳຂວັນແຫ່ງອິດສະຫລະພາບ, ຄວາມສະເໝີພາບ - ແລະ ຄວາມເປັນອ້າຍນ້ອງກັນ. ນັກແນວຄິດນາຍທຶນທັງຫລາຍ ໄດ້ກ່າວ ປະນາມອະພິສິດຂອງຊັ້ນຄົນຂອງພວກສັກດີນາ ແລະ ມາດຕະຖານສິນທຳ ຂອງພວກເຂົາ. ແຕ່ພາຍຫລັງທີ່ໄດ້ສ້າງຕັ້ງການປົກຄອງຂອງຕົນຂຶ້ນມາແລ້ວ, ນາຍທຶນໄດ້ປະລະຄຳຂວັນກ່ຽວກັບອິດສະຫລະພາບ, ຄວາມສະເໝີພາບ ແລະ ຄວາມເປັນອ້າຍນ້ອງກັນ. ລັດທິທຶນນິຍົມຖືວ່າ ທຸກໆການພົວພັນລະຫວ່າງ ຄົນລ້ວນແຕ່ແມ່ນການພົວພັນດ້ານເງິນຕາ. ກ.ມາກ ໄດ້ຂຽນກ່ຽວກັບສິນທຳນາຍທຶນວ່າ: "ຂ້າພະເຈົ້າເປັນຄົນຮູບຂີ້ຮ້າຍ, ແຕ່ຂ້າພະເຈົ້າສາມາດຊື້ເອົາ ແມ່ຍິງທີ່ງາມທີ່ສຸດ...ໝາຍ ຄວາມວ່າ ຂ້າພະເຈົ້າບໍ່ແມ່ນຄົນຮູບຂີ້ຮ້າຍ, ເພາະວ່າເງິນໄດ້ລຶບລ້າງຄວາມຂີ້ຮ້າຍ, ທັບມ້າງອຳນາດຂອງຄວາມຂີ້ຮ້າຍຖິ້ມ... ຂ້າພະເຈົ້າເປັນຄົນຊົ່ວ, ບໍ່ຊື່ສັດ, ບໍ່ມີມະໂນທຳ, ບໍ່ສະຫລາດ, ແຕ່ເງິນ ໄດ້

---

໑) ກ.ມາກ ແລະ ຟ.ອັງແກນ ບົດນິພົນ ເຫລັ້ມ ໔໐, ໜ້າ ໖໕-໖໖.

ຮັບຄວາມນັບຖື ແລະ ຫມາຍຄວາມວ່າ ເຈົ້າຂອງເງິນກໍໄດ້ຮັບຄວາມ ນັບຖືເຊັ່ນກັນ" ໑). ເງິນ "ເຮັດໃຫ້ຄວາມຊື່ສັດສຸດຈະຫລິດກາຍເປັນການ ທໍລະຍົດ, ຄວາມຮັກກາຍເປັນຄວາມແຄ້ນ, ຄວາມແຄ້ນ ກາຍເປັນຄວາມຮັກ,ຄຸນຄວາມດີກາຍເປັນຄວາມຊົ່ວຊ້າ, ຄວາມຊົ່ວຊ້າກາຍເປັນຄຸນຄວາມດີ,ຂ້າທາດກາຍເປັນເຈົ້າທາດ, ເຈົ້າທາດກາຍເປັນຂ້າທາດ, ຄວາມໂງ່ຈ້າກາຍເປັນຄວາມສະຫລາດ, ຄວາມສະຫລາດ ກາຍເປັນຄວາມໂງ່ຈ້າ "໒).

ຫລັກການພົ້ນຖານຂອງສິນທຳນາຍທຶນແມ່ນລັດທິເອກະຊົນນິຍົມ,ເພາະວ່າແຕ່ລະຄົນເປັນຫ່ວງເປັນໄຍນຳແຕ່ຕົນເອງ, ມຸ່ງຫນ້າຫາແຕ່ຜົນປະໂຫຍດສ່ວນຕົວ. ຄວາມສົມບູນພູນສຸກຂອງຄົນຈຳພວກຫນຶ່ງສ້າງຂຶ້ນເທິງຄວາມທຸກທໍລະມານຂອງຜູ້ອື່ນ ຫມາຍຄວາມວ່າ "ມີໃຜຍາວ ສາວໄດ້ສາວເອົາ". ແຕ່ຖ້າຈະປະກາດຫລັກການລັດທິເອກະຊົນນິຍົມຢ່າງເປີດເຜີຍແລ້ວ ແມ່ນບໍ່ມີຜົນດີໃຫ້ແກ່ -ນາຍທຶນ. ສະນັ້ນນາຍທຶນພະຍາຍາມອາດພາບ ການສະແຫວງຫາ ຜົນປະໂຫຍດສ່ວນຕົວນັ້ນ ໃຫ້ເປັນຄືຄວາມຫ່ວງໄຍເຖິງຄວາມສົມບູນພູນສຸກຂອງ ສັງຄົມ. ດ້ວຍເຫດນີ້ ສິນທຳນາຍທຶນຈຶ່ງມີລັກສະນະຫນ້າໄຫວ້ຫຼັງຫລອກ.ນາຍທຶນພະຍາຍາມບັງຄັບໃຫ້ທົ່ວທັງສັງຄົມຮັບເອົາສິນທຳແບບເຫັນແກ່ຕົວຂອງຕົນ.ມັນສົ່ງຜົນສະທ້ອນຢ່າງແຮງໂດຍສະເພາະໃສ່ຊັ້ນຄົນນາຍທຶນນ້ອຍ ທີ່ມີຈຸດພິເສດ, ເຊັ່ນຫລັກຫມັ້ນບໍ່ແຫນ້ນແກ່ນ, ໄຮ້ຫລັກການໃນການຄັດເລືອກພາຫະນະ ເພື່ອບັນລຸຈຸດປະສົງ, ລັດທິຊາຍຈັດຂວາໂພດ, ໄຮ້ຄວາມສາມາດແລະປາສະຈາກມານະຈິດທີ່ຈະດຳເນີນການຕໍ່ສູ້ຕ້ານກັບທຶນຜູກຂາດ. ໃນການຕີລາຄາ ຄຸນທຳຂອງນາຍທຶນນ້ອຍ, ວ.ອິ.ເລນິນໄດ້ເວົ້າວ່າ: "ຖ້າຫາກຂ້າພະເຈົ້າ ເປັນເຈົ້າຂອງດິນຕອນນີ້ແລ້ວ, ຂ້າພະເຈົ້າບໍ່ເອົາທຸລະກັບດິນຕອນອື່ນ; ຖ້າຫາກຜູ້ອື່ນອຶດຫິວ ກໍແຮງດີຊ້ຳ, ຂ້າພະເຈົ້າຈະໄດ້ຂາຍເຂົ້າຈີ່ຂອງຕົນໃຫ້ແພງ ກວ່າເກົ່າ. ຖ້າຫາກຂ້າພະເຈົ້າມີຫນ້າທີ່ຕຳແຫນ່ງເຊັ່ນແພດ, ນັກວິສະວະກອນ , ຄູສອນ, ລັດຖະກອນແລ້ວ, ຂ້າພະເຈົ້າກໍບໍ່ເອົາທຸລະຫຍັງກັບຜູ້ອື່ນອີກ. ບາງທີໂດຍອຳນວຍຄວາມສະດວກ, ເອົາຈິດເອົາໃຈອຳນາດການປົກຄອງຂອງ ຜູ້ຮັ່ງມີແລ້ວ, ຂ້າພະເຈົ້າຈະຮັກສາຫນ້າທີ່ຕຳແຫນ່ງຂອງຕົນໄວ້ໄດ້, ຫລືບາງທີ

---

໑) ກ.ມາກ ແລະ ຟ.ອັງແກນ.ບົດນິພົນ,ເຫລັ້ມ ໔໒, ຫນ້າ ໑໔໗.

໒) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ໔໒, ຫນ້າ ໑໕໐.

ກໍສາມາດອົບຮົມ ແລະ ກາຍເປັນນາຍທຶນນຳເພິ່ນກໍເປັນໄປໄດ້" ໑).

ກົງກັນຂ້າມກັບສິນທຳນາຍທຶນ ຊາວກຳມະກອນໄດ້ສ້າງສິນທຳກຳມາ ຊີບຂອງຕົນຂຶ້ນມາທ່າມກາງການອອກແຮງງານຮ່ວມກັນ ແລະ ໃນບັນດາ ຂັ້ນຮົບອຶນຊຶ້ນ. ອັນນີ້ມັນແມ່ນສິນທຳໃຫມ່ທີ່ມີມະນຸດສະທຳຢ່າງແທ້ຈິງ, ມັນບໍ່ພຽງແຕ່ໄດ້ສ່ອງແສງເຖິງເງື່ອນໄຂຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານເທົ່ານັ້ນ, ແຕ່ຍັງສ່ອງແສງເຖິງການຕໍ່ສູ້ຂອງພວກເຂົາເຈົ້າເພື່ອສັງຄົມໃຫມ່ ສັງຄົມນິຍົມທີ່ບໍ່ມີການກົດຂີ່ຂົ່ມເຫັງໃດໆເລີຍ. ຊົນຊັ້ນກຳມະກອນ ແມ່ນຊົນຊັ້ນທີ່ກ້າວຫນ້າທີ່ສຸດໃນສັງຄົມ, ໄດ້ສ້າງຕັ້ງບັນດາຫລັກການສິນທຳ, ຄວາມຮັບຮູ້ແລະຄວາມຮູ້ສຶກ ທີ່ຊ່ວຍພວກເຂົາເຈົ້າໃນການຕໍ່ສູ້ຕ້ານນາຍທຶນ. ກົກເຫງົ້າແຫ່ງ ສິນທຳກອມມູນິດນິຍົມ, ພື້ນຖານແຫ່ງການກຳເນີດ ແລະ ຂະຫຍາຍຕົວຂອງມັນແລະທັງແມ່ນມາດຕະຖານອັນສູງທີ່ສຸດຂອງມັນນັ້ນ ແມ່ນ"ການຕໍ່ສູ້ເພື່ອປັບປຸງ ຮັດແຫນ້ນ ແລະ ເພື່ອຄວາມສຳເລັດຂອງລັດທິກອມມູນິດນິຍົມ" ໒).

ວຽກງານນຳເອົາສະຕິສິນທຳກອມມູນິດນິຍົມ ເຂົ້າສູ່ສະຕິຂອງມະຫາ ຊົນຊາວຜູ້ອອກແຮງງານ ແມ່ນຫນ້າທີ່ຂອງບັນດາພັກກອມມູນິດ ແລະ ພັກກຳມະ-ກອນ. ພ.ກ.ສ.ຊ. ແລະ ບັນດາພັກອ້າຍນ້ອງປະເທດວົງຄະນາຍາດສັງຄົມນິຍົມອື່ນໆ ໄດ້ມີບົດຮຽນອັນໃຫຍ່ຫລວງ ແລະ ລ້ຳຄ່າໃນວຽກງານອົບຮົມ ສິນທຳພາຍໃນກຸ່ມສະມາຊິກຂອງສັງຄົມສັງຄົມນິຍົມ. ການຮ່ວມກັນຄົ້ນຄວ້າ ບົດຮຽນດັ່ງກ່າວນອຳນວຍເງື່ອນໄຂສະດວກໃຫ້ແກ່ການເສີມຂະຫຍາຍ ວຽກງານອົບຮົມໃນຂັ້ນຕໍ່ໄປ, ເຮັດໃຫ້ຄວາມຮູ້ຂອງຄົນກ່ຽວກັບບັນດາຫລັກການຄູນສົມ-ບັດກອມມູນິດນິຍົມນັ້ນ ກາຍເປັນຫລັກຫມັ້ນທີ່ເລິກເຊິ່ງ ແລະ ການກະທຳ ຕົວຈິງເພື່ອບັນລຸຊຸດົມຄະຕິສິນທຳກອມມູນິດນິຍົມໃຫ້ປະກົດຜົນເປັນຈິງ.

---

໑) ວ.ອິ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໔໑, ຫນ້າ ៣໑໔.

໒) ວ.ອິ.ເລນິນ. ບົດນິພົນຄົບຊຸດ. ເຫລັ້ມ ໔໐, ຫນ້າ ៣໑៣.

ດັ່ງດຽວກັບຮູບແບບອື່ນໆ ຂອງສະຕິສັງຄົມ ສະຕິສິລະປະທັດ ແມ່ນການທີ່ຄົນສ່ອງແສງເຖິງການດຳລົງຄົງຕົວສັງຄົມ. ການກຳເນີດຂອງມັນຕິດພັນ ກັບກັບການເຄື່ອນໄຫວອອກແຮງງານ. ມັນສ່ອງແສງເຖິງການເຄື່ອນໄຫວ ດັ່ງກ່າວ ແລະ ຮັບໃຊ້ຄວາມຕ້ອງການອັນແນ່ນອນຂອງສັງຄົມ.

ໃນຂະບວນວິວັດແຫ່ງການອອກແຮງງານ ໄດ້ເກີດມີການເຄື່ອນໄຫວກ່ຽວກັບສິລະປະທັດປະເພດຕ່າງໆ. ໃນນັ້ນກ່ອນອື່ນໝົດ ແມ່ນການເຄື່ອນໄຫວໃນວົງເຂດການຜະລິດ. ໃນຂະບວນວິວັດແຫ່ງການອອກແຮງງານຄົນໄດ້ຜະລິດ-ສິ່ງວັດຖຸຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການດ້ານວັດຖຸ ແລະ ຈິດໃຈຂອງຕົນ ພ້ອມໆກັນ, ເຊິ່ງແມ່ນສິ່ງວັດຖຸທີ່ມີຄຸນປະໂຫຍດສຳລັບຊີວິດການເປັນຢູ່ ແລະ ການເຄື່ອນໄຫວ ແລະ ພາໃຫ້ເກີດມີຄວາມເພິ່ງພໍໃຈໃນເມື່ອຊົມໃຊ້ມັນ. ຜະລິດຕະພັນຂອງການອອກແຮງງານ ແບບສະເພາະ ແມ່ນຜົນງານ ສິລະປະກຳ (ຮູບແຕ້ມ, ຮູບປັ້ນ, ດົນຕີ, ວັນນະຄະດີ ແລະ ອື່ນໆ).ເຊັ່ນຕົວຢ່າງ, ຜົນງານດ້ານວັນນະຄະດີລະດັບ ໂລກ, ທັງເປັນຍອດສູງຂອງ ວັນນະຄະດີລາວນັ້ນ ແມ່ນນິທານເລື່ອງ "ສິນໄຊ" ຂອງ ປາງຄຳ ສະໄໝ ສະຕະວັດທີ ໑໖-໑໗. ໃນໄລຍະຫລັງໆມານີ້ ການແຕ້ມຮູບສີ (ສີສະແລັກ, ສີນ້ຳມັນ: ນວນລະອອງ, ວິລິວົງ ), ແລະ ຮູບປັ້ນໄດ້ຮັບການເສີມຂະຫຍາຍ - ຢ່າງກວ້າງຂວາງຢູ່ລາວ; ຄຽງຄູ່ກັບເນື້ອເລື່ອງນິທານສາສະໜາພຸດແລ້ວໄດ້ເລີ່ມຕົ້ນມີການວາດພາບຊີວິດຂອງປະຊາຊົນ, ພາບທິວທັດ ແລະ ອື່ນໆ. ມູນເຊື້ອຄວັດໄມ້ປະຕູ ແລະ ປ່ອງຢ້ຽມ,ຮູບແຕ້ມເອ້ຢ້ອງຝາເຮືອນກໍໄດ້ຮັບການ-ປັບປຸງຄືນໃໝ່.

ສະຕິສິລະປະທັດ ກວມລວມເອົາຄວາມຮູ້ສຶກ, ຄວາມຄິດຄວາມເຫັນ , ຄວາມສຳນຶກ, ອຸດົມຄະຕິ, ທັດສະນະ ແລະ ທິດສະດີທີ່ສ່ອງແສງເຖິງຄຸນຄ່າດ້ານສິລະປະທັດຂອງສິ່ງວັດຖຸ ແລະ ປະກົດການຕ່າງໆແຫ່ງຄວາມເປັນຈິງ , ລວມທັງກະໂຕການເຄື່ອນໄຫວດ້ານສິລະປະທັດຂອງຄົນ ແລະ ຜົນງານດ້ານສິລະປະກຳຂອງພວກເຂົາເຈົ້າ.

ບັນດາໜ້າທີ່ພື້ນຖານຂອງສິລະປະກຳແມ່ນ: ໜ້າທີ່ດ້ານການຮັບຮູ້,ແນວ

ຄິດ (ອົບຣົມແນວຄິດ) ແລະ ສິລະປະທັດ.

ໜ້າທີ່ດ້ານການຮັບຮູ້ ສະແດງອອກໃນການທີ່ ສິລະປະກຳສ່ອງແສງເຖິງຄວາມເປັນຈິງ. ເຊັ່ນ ຖ້າຫາກວິທະຍາສາດສ່ອງແສງເຖິງຄວາມເປັນ ຈິງ ແລະ ກຳນົດບັນດາກົດເກນລວມໂດຍບໍ່ເນັ້ນໜັກໃສ່ອັນສະເພາະແລ້ວ, ແມ່ນວ່າສິລະປະກຳສ່ອງແສງເຖິງອັນລວມໂດຍຜ່ານອັນສະເພາະ. ວິທະຍາສາດ-ຮັບຮູ້ໂລກທາງທິດສະດີ, ສິລະປະກຳ ຮັບຮູ້ໂລກທາງສິລະປະທັດ. ຖ້າຫາກໃນວິທະຍາສາດເຄື່ອງມືພື້ນຖານຂອງຄວາມຮັບຮູ້ ແລະ ເຄື່ອງສະແດງ ຂອງມັນແມ່ນຄວາມຮູ້, ສ່ວນໃນສິລະປະກຳມັນແມ່ນຮູບພາບ. ຖ້າຫາກວິທະຍາ ສາດພະຍາຍາມຮັບຮູ້ບັນດາກົດເກນພາວະວິໄສຂອງບັນດາປະກົດການແຫ່ງ ຄວາມເປັນຈິງແລ້ວ, ແມ່ນວ່າສິລະປະກຳພະຍາຍາມຮັບຮູ້ອັນເດັ່ນໃນບັນດາ ປະກົດການ.

ລັກສະນະພິເສດຂອງສິລະປະກຳ ແມ່ນໜ້າທີ່ດ້ານແນວຄິດ (ອົບຣົມແນວຄິດ) ຂອງມັນ. ສະຕິສິລະປະທັດ ແລະ ສິລະປະກຳພົວພັນກັບແນວຄິດ, ກ່ອນອື່ນໝົດ ຍ້ອນວ່າມັນສະແດງເຖິງແນວຄິດຂອງຊົນຊັ້ນນີ້ຫລືຊົນຊັ້ນນັ້ນ; ຂໍ້ທີສອງມັນຕິດພັນຢ່າງບໍ່ຂາດສາຍກັບການພົວພັນຂອງຄົນໃນສັງຄົມ, ປົກປ້ອງຜົນ ປະໂຫຍດຂອງກຸ່ມຄົນໃນສັງຄົມກຸ່ມໜຶ່ງ ແລະ ຕ້ານຜົນປະໂຫຍດຂອງກຸ່ມຄົນອື່ນ.

ໃນໜ້າທີ່ດ້ານແນວຄິດຂອງສິລະປະກຳ, ລັກສະນະຊົນຊັ້ນຂອງມັນ ສະແດງອອກຢ່າງຈະແຈ້ງກວ່າໝູ່. ແຕ່ລະສິລະປະກຳມີລັກສະນະແນວຄິດ ໂດຍບໍ່ຂຶ້ນກັບວ່າກະໂຕນັກສິລະປະກຳຈະຮັບຮູ້ມັນຫລືບໍ່ກໍ່ຕາມ. ບັນຫາຢູ່ບ່ອນວ່າມັນຮັບໃຊ້ຊົນຊັ້ນໃດຫລືບັນດາຊົນຊັ້ນໃດ. ສິລະປະກຳສາມາດຮັບໃຊ້ຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ, ເຮັດໃຫ້ບຸກຄົນມີຄວາມເຊື່ອໝັ້ນໃນ ຄວາມກ້າວໜ້າ, ໃນອະນາຄົດອັນສະຫງ່າງາມ, ຮຽກຮ້ອງໃຫ້ພວກເຂົາເຈົ້າເຂົ້າຮ່ວມໃນການຕໍ່ສູ້ເພື່ອອະນາຄົດດັ່ງກ່າວ. ສິລະປະກຳອາດຮັບໃຊ້ບັນດາຊົນຊັ້ນທີ່ຫລ້າຫລັງ ແລະ ປະຕິການ, ພາໃຫ້ຄົນມີແນວຄິດຫລູຊະທັດນິຍົມ, ບໍ່ເຊື່ອໝັ້ນຕໍ່ຄວາມກ້າວໜ້າຂອງສັງຄົມ, ສົ່ງເສີມລັດທິເອກະຊົນນິຍົມ, ເຫັນແຕ່ຜົນໄດ້ສ່ວນຕົວ, ໜີອອກໄປສູ່ໂລກແຫ່ງຜົນປະໂຫຍດສ່ວນຕົວແບບຄັບແຄບ.

ໜ້າທີ່ສິລະປະທັດຂອງສິລະປະກຳ ມີການພົວພັນຢ່າງແໜ້ນແຟ້ນກັບໜ້າທີ່ດ້ານການຮັບຮູ້ ແລະ ແນວຄິດ (ອົບຣົມແນວຄິດ) ຂອງມັນ. ກ່ອນອື່ນໝົດ

ສິລະປະກຳກະທົບໃສ່ຄວາມຮູ້ສຶກ, ແລະ ຜ່ານຄວາມຮູ້ສຶກກະທົບໃສ່ສະຕິ ປັນຍາຂອງຄົນ. ມັນມີກຳລັງກະທົບໃສ່ຄວາມຮູ້ສຶກຂອງຄົນຢ່າງໃຫຍ່ຫລວງ. ເຫດການທີ່ໄດ້ວາດພາບອອກໃນວັນນະຄະດີ ສາມາດກະທົບແຮງກວ່າເຫດການຕົວຈິງອັນດຽວກັນ, ທີ່ຄົນໄດ້ເຫັນກັບຕາ.

ລັດທິມາກ-ເລນິນ ຖືວ່າ ນັກສິລະປິນ ບໍ່ອາດຈະບໍ່ຂຶ້ນກັບສັງຄົມ,ແລະໃນສັງຄົມທີ່ມີຊົນຊັ້ນ ບໍ່ອາດຈະບໍ່ຂຶ້ນກັບຜົນປະໂຫຍດຂອງຊົນຊັ້ນທີ່ແນ່ນອນ. ສິລະປະກຳໃນສັງຄົມ ທີ່ມີຊົນຊັ້ນບໍ່ອາດຈະຢູ່ນອກການເມືອງໄດ້. ໂດຍສ່ອງ ແສງເຖິງຄວາມເປັນຈິງໃນທັດສະນະຂອງຊົນຊັ້ນນີ້ ຫລືຊົນຊັ້ນນັ້ນ, ໂດຍຢັ້ງຢືນ ຊຸດົມຄະຕິຂອງຊົນຊັ້ນດັ່ງກ່າວແລ້ວ, ສິລະປະກຳອຳນວຍເງື່ອນໄຂສະດວກ ໃຫ້ແກ່ການເພີ່ມທະວີ ແລະ ເສີມຂະຫຍາຍລະບອບສັງຄົມທີ່ມີຢູ່ຫລືຕໍ່ສູ້ຕ້ານ ລະບອບສັງຄົມດັ່ງກ່າວ. ໂດຍຂຶ້ນກັບການທີ່ສິລະປະກຳຮັບໃຊ້ໃຫ້ຜົນປະໂຫຍດ - ຂອງຊົນຊັ້ນໃດແລ້ວ, ມັນມີບົດບາດໃນສັງຄົມຢ່າງແຕກຕ່າງກັນ. ບັນດາ ຊົນຊັ້ນກົດຂີ່ຂູດຣີດ ພະຍາຍາມຫມູນໃຊ້ສິລະປະກຳ ເພື່ອອົບຮົມມະຫາຊົນໃຫ້ມີຈິດໃຈບອກໄດ້ໃຊ້ຟັງ ແລະ ຍິນຍອມກົ້ມຫົວຕໍ່ລະບຽບການທີ່ມີຢູ່.

ສັງຄົມ ສັງຄົມນິຍົມ ຊີ້ນຳສິລະປະກຳເພື່ອຮັບໃຊ້ຊາວຜູ້ອອກແຮງງານ,ຕໍ່ສູ້ເພື່ອປົດປ່ອຍປະຊາຊົນໃຫ້ຫລຸດພົ້ນອອກຈາກການຂູດຣີດ ແລະ ການກົດຂີ່ຂົ່ມເຫັງ, ນຳໃຊ້ສິລະປະກຳເປັນສິ່ງຫນຶ່ງ ໃນບັນດາພາຫະນະທີ່ສຳຄັນທີ່ສຸດ ໃນການອົບຮົມກອມມູນິດນິຍົມ ແລະ ເສີມຂະຫຍາຍບຸກຄົນຢ່າງຮອບດ້ານ.

ວ.ອີ.ເລນິນ ໄດ້ສ້າງພື້ນຖານຫລັກການມີລັກສະນະພັກຂອງວັນນະຄະ ດີ ແລະ ສິລະປະກຳ. ທ່ານໄດ້ພິສູດວ່າ ແນວຄິດລັກສະນະພັກ ແມ່ນ ແນວຄິດຂອງຊົນຊັ້ນກຳມາຊີບ, ເນື່ອງຈາກວ່າ ຊົນຊັ້ນກຳມາຊີບ ມີຄວາມສົນໃຈຢາກໃຫ້ການສ່ອງແສງເຖິງຄວາມເປັນຈິງນັ້ນ ແມ່ນການສ່ອງແສງແບບສິລະປະ ທີ່ຖືກຕ້ອງ; ສ່ວນແນວຄິດໄຮ້ລັກສະນະພັກແມ່ນແນວຄິດຂອງນາຍທຶນ, ເພາະ-ວ່າ ນາຍທຶນຢ້ານກົວ ການວາດພາບຊີວິດການເປັນຢູ່ຢ່າງແທດເຫມາະ ກັບຄວາມຈິງ.

ໂດຍຍຶດຖືຫລັກການສິລະປະກຳສັງຄົມນິຍົມ ມີລັກສະນະພັກແລ້ວ, ບັນດານັກສິລະປິນໄດ້ສ້າງຜົນງານ ທີ່ມີແນວຄິດກອມມູນິດອັນສູງສົ່ງ ແລະສັດຈະທຳແຫ່ງຊີວິດອັນເລິກເຊິ່ງ, ເຊິ່ງແມ່ນຜົນງານທີ່ຕິດພັນຢ່າງບໍ່ຂາດສາຍກັບລັກສະ

ມະປະຊາຊົນ.

ສິລະປະກຳ ເວລາໃດກໍ່ແມ່ນຂອງຊາດ, ຂອງປະຊາຊົນ.ບໍ່ມີຄະນິດສາດຂອງລາວທີ່ແຕກຕ່າງຈາກຄະນິດສາດຂອງລັດເຊຍ. ແຕ່ມີຮູບແຕ້ມ ແລະ ວັນນະຄະດີຂອງລັດເຊຍ ແລະ ມີຮູບແຕ້ມ ແລະ ວັນນະຄະດີລາວ. ລັກສະນະມະຫາຊົນ ຂອງສິລະປະກຳ ກ່ອນອື່ນຫມົດສະແດງໃຫ້ເຫັນນິດໄສ ແລະຈິດຕະສາດຂອງປະຊາຊົນ. ລັກສະນະມະຫາຊົນ ຂອງສິລະປະກຳ ຍັງສະແດງອອກຢູ່ບ່ອນມັນວາດພາບຢ່າງແທດເຫມາະກັບຄວາມເປັນຈິງ ກ່ຽວກັບຊີວິດ ການເປັນຢູ່, ຜົນປະໂຫຍດ, ການຕໍ່ສູ້, ແນວຄິດ, ແລະ ຄວາມມຸ່ງມາດປາຖະຫນາຂອງປະຊາຊົນ. ຕາມຫລັກການແລ້ວ, ຜົນງານສິລະປະກຳທີ່ມີ ນ້ຳຫນັກຫລາຍກວ່າຫມູ່ນັ້ນ ແມ່ນຜົນງານທີ່ໄດ້ສ່ອງແສງເຖິງບັນຫາຕ່າງໆ ທີ່ສົ່ນ ສະເທືອນອາລົມຂອງຫມູ່ມະຫາຊົນ.

ໃນເງື່ອນໄຂຂອງສັງຄົມທີ່ມີການກົດຂີ່ຂູດຮີດ ສິລະປະກຳບໍ່ແມນຂອງ ປະຊາຊົນ. ຊາວຜູ້ອອກແຮງງານບໍ່ມີເງື່ອນໄຂສະດວກ ທີ່ຈະໄດ້ຊື່ນຊົມກັບສິລະປະກຳ. ພຽງແຕ່ສັງຄົມນິຍົມເທົ່ານັ້ນ ຈຶ່ງໄດ້ເປີດໂອກາດໃຫ້ປະຊາຊົນໄດ້ໃກ້ຊິດກັບສິລະປະກຳທີ່ແທ້ຈິງ. ວ.ອິ.ເລນິນ ເຄີຍໄດ້ຊີ້ແຈງວ່າ ໃນເງື່ອນ ໄຂສັງຄົມນິຍົມ ສິລະປະກຳ ແມ່ນຂອງປະຊາຊົນ, ມັນຕ້ອງຝັງຮາກ ຢ່າງເລິກເຊິ່ງທີ່ສຸດເຂົ້າໃນມະຫາຊົນ ຊາວຜູ້ອອກແຮງງານ ຈຳນວນຫລວງຫລາຍແລະຕ້ອງໄດ້ຮັບຄວາມເຂົ້າໃຈ ແລະ ຮັກຫອມຈາກມະຫາຊົນ, ຕ້ອງທ້ອນ ໂຮມເອົາຄວາມຮູ້ສຶກ, ມານະຈິດ ແລະ ແນວຄິດຂອງມະຫາຊົນເຫລົ່ານັ້ນ, ປຸກລຸກພວກເຂົາເຈົ້າ, ຕ້ອງຂຸດຄົ້ນ ແລະ ສົ່ງເສີມ ບັນດາສິລະປິນໃນຫມູ່ ມະຫາຊົນ.

ຫລັກການມີລັກສະນະພັກກຳນົດການນຳພາຂອງພັກ ໃນວຽກງານເສີມຂະຫຍາຍສິລະປະກຳ. ການ ນຳພາດ້ານແນວຄິດຂອງພັກກອມມູນິດໃນການເສີມຂະຫຍາຍສິລະປະກຳນັ້ນ ຮຽກຮ້ອງໃຫ້ມີການອົບຮົມແນວຄິດແກ່ ສິລະປິນ ຜູ້ດີເດັ່ນ, ຊຸກຍູ້ການປະດິດສ້າງສິລະປະກຳໃຫ້ຈະເລີນຮຸ່ງເຮືອງ, ຄົ້ນພົບລັກສະນະສະເພາະທີ່ມີຫລາຍຮູບຫລາຍສີຂອງບັນດານັກສິລະປິນທີ່ໄດ້ອຸທິດແຮງ ງານຂອງຕົນເພື່ອຮັບໃຊ້ປະຊາຊົນ.

ສາສະໜາ ແມ່ນການສ່ອງແສງແບບໄຝ່ຝັນ "ໃນຫົວຄົນເຖິງກຳລັງພາຍນອກ ທີ່ຄອບຄອງຄົນຢູ່ໃນຊີວິດປະຈຳວັນ, ແມ່ນການສ່ອງແສງເຊິ່ງໃນນັ້ນກຳລັງທຳມະຊາດໄດ້ກາຍເປັນກຳລັງອັນມະຫັດສະຈັນ" ໑). ຈຸດພິເສດຂອງສາສະໜາແມ່ນການເຊື່ອຖືໃນສິ່ງມະຫັດສະຈັນເຊັ່ນ: ພະເຈົ້າ, ໂລກໜ້າ, ຊີວິດໃນໂລກໜ້າ, ຄົນຕາຍແລ້ວເກີດໃໝ່ ແລະ ອື່ນໆ. ພື້ນຖານຂອງໂລກະທັດຕາມສາສະໜາ ແມ່ນການເຊື່ອຖືວ່າ ນອກຈາກໂລກຮອບຕົວເຮົາທີ່ ເຮົາຮັບຮູ້ແລ້ວນັ້ນ ຍັງມີໂລກອື່ນທີ່ມະຫັດສະຈັນ ແລະ ເຮົາບໍ່ສາມາດຈະຮັບຮູ້ໄດ້. ຕາມສາສະໜານັ້ນ ມີແຕ່ຕ້ອງເຊື່ອວ່າໂລກທີສອງນັ້ນມີຈິງແທ້.

ສາສະໜາ ແລະ ສະຕິສາສະໜາ ແມ່ນໝາກຜົນຂອງການຂະຫຍາຍ-ຕົວ ທາງສັງຄົມ. ສະຕິສາສະໜາ ກໍຄືກັນກັບຮູບແບບອື່ນໆ ຂອງສະຕິ ສັງຄົມ, ແມ່ນການສ່ອງແສງເຖິງຄວາມເປັນຈິງຮອບຕົວຄົນ. ຄວາມເປັນຈິງ ບໍ່ໄດ້ກຳເນີດຢູ່ເທິງຟ້າດັ່ງທີ່ສາສະໜາໄດ້ຢືນຢັນ. ຫາກແມ່ນກຳເນີດຢູ່ ໃນໜ່ວຍໂລກ, ທ່າມກາງເງື່ອນໄຂຊີວິດການເປັນຢູ່ຂອງຄົນ.

ສາສະໜາ ແລະ ສະຕິສາສະໜາ ມີຕົ້ນເຫດຂອງການກຳເນີດ ແລະ ການຄົງຢູ່ຂອງມັນ. ຄວາມຢ້ານກົວຂອງຄົນຕໍ່ໜ້າກຳລັງແຮງທີ່ພວກເຂົາເຈົ້າບໍ່ເຂົ້າໃຈ ເຊັ່ນແຜ່ນດິນໄຫວ, ນ້ຳຖ້ວມ ແລະ ໄພທຳມະຊາດອື່ນໆ ນຳໄປສູ່ການເຊື່ອຖືສາສະໜາ. ກຳລັງທຳມະຊາດທີ່ບໍ່ອາດອະທິບາຍໄດ້ ແລະ ເລິກລັບ ແຕ່ວ່ານັ້ນແຂງແຮງກວ່າ ເຊິ່ງຢູ່ຕໍ່ໜ້າກຳລັງອັນນີ້ແລ້ວ ຄົນຮູ້ສຶກວ່າຕົນອ່ອນແອນັ້ນ ໄດ້ກາຍເປັນຜີດີ ແລະ ຜີຮ້າຍ, ພະເຈົ້າ, ເທວະດາ, ຍັກ, ແມ່ມົດ ແລະ ອື່ນໆ ໃນຈິດສຳນຶກຂອງຄົນ. ກຳລັງທີ່ສ້າງເງື່ອນໄຂໃຫ້ສາສະ-ໜາກຳເນີດຂຶ້ນມານັ້ນຍັງມີກຳລັງສັງຄົມທີ່ຢູ່ເໜືອອຳນາດຂອງຄົນເຊັ່ນ: ການຖືກກົດຂີ່ເຫັງ ແລະ ຄວາມຢ້ານກົວຕໍ່ຊົນຊັ້ນປົກຄອງ ຄືພວກເຈົ້າທາດ, ເຈົ້າສັກດີນາ, ນາຍທຶນ, ຄວາມບໍ່ສາມາດຈະອະທິບາຍສາຍເຫດແຫ່ງການ ຄົງຢູ່

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫຼັ້ມ ໒໐, ໜ້າ ๓໒໘.

ຢ່າງທຸກຍາກຂາດເຂີນ ແລະ ໄຮ້ສິດທິຂອງຕົນ. ສາຍເຫດແຫ່ງການປະກົດ-ຕົວ ຂອງສາສະໜາດັ່ງກ່າວນີ້ ແມ່ນຮາກເຫງົ້າທາງສັງຄົມຂອງມັນ. ພ້ອມກັບການຂະຫຍາຍຕົວດ້ານກຳລັງການຜະລິດ, ບັນຫາຄົນອົບກັບທຳມະຊາດ ເຖິງຈະບໍ່ທັນສູນຫາຍໄປ (ໂດຍສະເພາະໃນການປູກຝັງ) ກໍ່ຕາມ, ແຕ່ກໍ່ ເລີ່ມຕົ້ນຫລຸດຜ່ອນລົງແດ່ແລ້ວ. ການທີ່ກຳລັງສັງຄົມທີ່ເກີດຂຶ້ນເອງ ໄດ້ຄອບຄອງຢູ່ເໜືອຄົນນັ້ນໄດ້ກາຍເປັນຕົ້ນເຫດພື້ນຖານຂອງສາສະໜາ ຊຶ່ງ ຝ.ອັງແກນ-ໄດ້ຊີ້ແຈງອອກໃຫ້ເຫັນວ່າ ກຳລັງເຫລົ່ານີ້ແມ່ນກຳລັງ "ທີ່ຝືນກັບຄົນໃນ່ຖານະເປັນກຳລັງທີ່ເລິກລັບ ແລະ ໃນເບື້ອງຕົ້ນກໍ່ອະທິບາຍບໍ່ໄດ້ເຊັ່ນດຽວກັນກັບກະໂຕກຳລັງທຳມະຊາດນັ້ນເອງ, ແລະ ຄອບຄອງເໜືອຄົນ ດ້ວຍຄວາມ ຈຳເປັນຕາມທຳມະຊາດ ຄ້າຍຄືກັນກັບກຳລັງທຳມະຊາດ "[1].

ໃນຮູບແບບໄຝ່ຝັນ ຄືພາບລວງຕາ ສະຕິສາສະໜາໄດ້ສ່ອງແສງແລະຝັງແໜ້ນຄວາມຮູ້ສຶກທຸກຍາກ ແລະ ຖືກໜີບຕັ້ງຂອງມະຫາຊົນຊາວຜູ້ອອກແຮງ - ງານ. ດັ່ງນີ້ ໃນສັງຄົມທີ່ມີຊົນຊັ້ນ ຮາກເຫງົ້າຂອງສາສະໜາແມ່ນ ຮາກເຫງົ້າທາງສັງຄົມເປັນຕົ້ນຕໍ. ວ.ອີ.ເລນິນ ໄດ້ຊີ້ແຈງວ່າ: " ການທີ່ມະຫາຊົນຊາວຜູ້ອອກແຮງງານຖືກໜີບຕັ້ງທາງສັງຄົມ, ຄວາມຮູ້ສຶກອ່ອນແອທີ່ພວກເຂົາເຈົ້າສຳນຶກເຕັ້ມໜ້າກຳລັງແຮງຂອງທຶນນິຍົມແບບມືດມົນ...ນີ້ລະແມ່ນຮາກເຫງົ້າອັນເລິກເຊິ່ງທີ່ສຸດຂອງສາດສະໜາໃນສະໄໝນີ້" [2].

ໃນທຸກວັນນີ້ ສາສະໜາສຳຄັນໃນໂລກແມ່ນ: ສາສະໜາ ຄຣິດ, ອິດສະລາມ ແລະ ສາສະໜາພຸດ.

ສາສະໜາ ຄຣິດ ໄດ້ປະກົດຕົວຂຶ້ນໃນສະຕະວັດທີ ໑, ໄດ້ແຜ່ຂະຫຍາຍໃນທະວີບເອີລົບ ແລະ ອາເມລິກາ. ຕາມການເຊື່ອຖືຂອງສາສະໜາ ຄຣິດແລ້ວ ຄົນຈະສາມາດບັນລຸຄວາມສຸກໄດ້ພຽງແຕ່ ໃນໂລກໜ້າ. ເງື່ອນໄຂ ທີ່ຂາດບໍ່ໄດ້ໃນການບັນລຸຄວາມສຸກດັ່ງກ່າວນີ້ແມ່ນ ຜູ້ເຊື່ອຖືສາສະໜາຕ້ອງ ອົດທົນຜ່ານຜ່າຄວາມທຸກທໍລະມານຢູ່ໃນໂລກນີ້. ດັ່ງນີ້ສາສະໜາ ຄຣິດຈຶ່ງອົບຮົມໃຫ້ມະຫາຊົນເປັນຜູ້ບອກໄດ້ໃຊ້ຟັງ, ຍອມຮັບລະບອບສັງຄົມອັນບໍ່ເປັນທຳທີ່ມີຢູ່.

---

໑) ກ.ມາກແລະຝ.ອັງແກນ.ບົດນິພົນ, ເຫລັ້ມ ໒໐, ໜ້າ ໓໒໘-໓໒໙.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໑໗, ໜ້າ ໔໑໙.

ຫລັງທີ່ເກີດມີຄວາມຂັດແຍ່ງພາຍໃນກະໂຕສາສະໜາ ຄຣິດ ແລ້ວ ຈຶ່ງມີການແຍກເປັນສາມທິດທາງ, ເຊັ່ນ: ກາໂຕລິກ, ອິກໂຕດົກ ແລະ ໂປຣ - ເຕສຕັງ.

ສາສະໜາອິດສະລາມ (ຫລືມູສະລິມ ) ໄດ້ກຳເນີດຂຶ້ນໃນສະຕະວັດ ທີ 7 ໃນໄລຍະທີ່ປະຊາຊົນຊາວອາຣັບ ໄດ້ຂ້າມຜ່ານຈາກລະບອບປະຖົມບູຮານ-ຂຶ້ນສູ່ລະບອບທີ່ມີຊົນຊັ້ນ. ອິດສະລາມ ແຜ່ຂະຫຍາຍຢູ່ໃນບັນດາປະເທດ ຕາເວັນອອກໃກ້ ແລະ ກາງ, ຢູ່ພາກເໜືອຂອງທະວີບອາຟຣິກກາ ແລະ ອາຊີຕາເວັນອອກສ່ຽງໃຕ້ເປັນຕົ້ນຕໍ. ພື້ນຖານຂອງສາສະໜານີ້ແມ່ນຄວາມເຊື່ອຖືຕໍ່ພະເຈົ້າອົງດຽວ ( ອາລາ ), ເຊິ່ງເປັນຜູ້ປະດິດສ້າງຟ້າ ແລະແຜ່ນດິນ. ທຸກໆເຫດການໃນໂລກຮອບຕົວຕະຫລອດທັງຊາຕາກຳຂອງຄົນເປັນໄປຕາມຈຸດປະສົງຂອງພະອາລາ. ສາສະໜາອິດສະລາມ ຊວນເຊື່ອຕໍ່ຜູ້ເຊື່ອຖືຂອງ ຕົນວ່າ ຄົນອ່ອນແອກວ່າພະເຈົ້າອາລາ ແລະ ສິດສອນໃຫ້ຄົນຕ້ອງໝູບໆຄານ ໆ ແລະ ບອກໄດ້ໃຊ້ຟັງ. ຜູ້ໃດຫາກຍອມຟັງ ແລະ ປະຕິບັດຕາມຄຳສອນ ຂອງພະອາລາ ຢ່າງເຄັ່ງຄັດແລ້ວ ຈະມີຄວາມສຸກສຳລານຢູ່ໃນສະຫວັນຊັ້ນຟ້າຫລັງຈາກຕາຍໄປແລ້ວ. ສ່ວນຜູ້ທີ່ບໍ່ຍອມເຊື່ອຟັງຈະຖືກລົງໂທດຢູ່ນະຣົກ.

ສາສະໜາທີ່ເກົ່າແກ່ທີ່ສຸດໃນໂລກແມ່ນສາສະໜາພຸດ (ສະຕະວັດທີ 6-5 ກ່ອນ ຄ.ສ. ). ຖືກັນວ່າ ບ່ອນເກີດຂອງສາສະໜາພຸດຢູ່ອິນເດຍ. ໂດຍມີການປ່ຽນແປງ ແລະ ດັດໃຫ້ເໝາະສົມກັບເງື່ອນໄຂທ້ອງຖິ່ນ ສາສະໜາພຸດໄດ້ແຜ່ຂະຫຍາຍຢູ່ໃນບັນດາປະເທດອາຊີໃຕ້, ຕາເວັນອອກສ່ຽງໃຕ້ແລະ ຕາເວັນອອກ. ສາສະໜາພຸດ ໄດ້ປະກົດຕົວຂຶ້ນມາ ເພື່ອຕ້ານກັບລະບອບຊັ້ນວັນນະ ແລະ ປະກາດຄວາມສະເໝີພາບຂອງທຸກໆຄົນ, ແຕ່ບໍ່ແມ່ນຄວາມ ສະເໝີພາບທາງສັງຄົມ, ຫາກແມ່ນຄວາມສະເໝີພາບໃນການທົນທຸກແລະ ໃນການ ຫລຸດພົ້ນອອກຈາກຄວາມທຸກດັ່ງກ່າວ. ສາສະໜາພຸດບໍ່ຕຳໜິຄວາມທຸກຈົນ, ການເປັນຂ້າທາດ, ການໄຮ້ສິດທິ. ອີງຕາມທິດສະດີນີ້ແລ້ວ ຄົນຍິ່ງທົນທຸກທໍລະມານເທົ່າໃດ ຍິ່ງຈະບັນລຸຄວາມພົ້ນທຸກໄດ້ຢ່າງແນ່ນອນເທົ່ານັ້ນ. ຖານະສັງຄົມ ແລະ ເສດຖະກິດບໍ່ແມ່ນສິ່ງທີ່ຈຳແນກຄົນໃຫ້ແຕກຕ່າງກັນ, ຫາກແມ່ນສິນທຳເປັນສິ່ງຈຳແນກຄວາມແຕກຕ່າງດັ່ງກ່າວ. ຄວາມສະເໝີພາບລະຫວ່າງຄົນສາມາດເກີດຂຶ້ນໄດ້ພຽງແຕ່ບົນພື້ນຖານການປັບປຸງຄຸນສົມບັດດ້ວຍຕົນ

ຂອງເທົ່ານັ້ນ. ດັ່ງນີ້ເອງ, ໂດຍສອນໃຫ້ຄົນຕ້ອງມີອຸເປກຂາ, ນອບນ້ອມຖ່ອມຕົວ ຍອມຮັບສະພາບຄວາມເປັນຈິງ, ບໍ່ຕອບຕ້ານກັບສິ່ງຊົ່ວຮ້າຍ (ອະຫິງສາ) ສາສະໜາພຸດປົກປ້ອງລະບຽບການ ທີ່ຄົງຢູ່, ແມ່ນວ່າມັນຈະເປັນ ລະບຽບການແບບໃດກໍ່ຕາມ.

ສາສະໜາພຸດ ບໍ່ຮັບຮູ້ລັກສະນະເປັນເອກະລາດຂອງໂລກວັດຖຸ. ສາສະໜາພຸດຖືວ່າ ພື້ນຖານຕົ້ນຕໍຂອງທຸກສິ່ງທີ່ຄົງຢູ່ນັ້ນ ແມ່ນອະນຸພາກ ດີທຳມະທີ່ບໍ່ເປັນວັດຖຸ ແລະ ເຄື່ອນເໜັງຢ່າງບໍ່ມີວັນຈະສຸດສິ້ນ. ການປະສົມແບບຕ່າງໆລະຫວ່າງທຳມະທີ່ເຄື່ອນເໜັງນັ້ນ ໄດ້ສ້າງສິ່ງວັດຖຸ, ສັດສາວາສິ່ງ - ແລະ ຄົນຂຶ້ນມາ. ການແຍກຕົວການປະສົມດັ່ງກ່າວນີ້ ຈະນຳໄປເຖິງ ຄວາມຕາຍ. ແຕ່ກະໂຕທຳມະເອງຈະປະກອບເປັນການປະສົມແບບໃໝ່, ຈາກນັ້ນຈຶ່ງມີການເກີດຄືນໃໝ່. ການເກີດຄືນໃໝ່ຈະດີກວ່າຫລືຮ້າຍກວ່າເກົ່າ ນັ້ນຂຶ້ນກັບບຸນ ແລະ ບາບຂອງຄົນ. ຖ້າຫາກເປັນຄົນທຸກຍາກ, ລຳບາກ, ເປັນພະຍາດໂລຄາແລ້ວ ແມ່ນວ່າໃນຊາດກ່ອນນີ້ເຂົາໄດ້ດຳເນີນຊີວິດແບບບໍ່ຢູ່ ໃນສິນກິນໃນທຳ. ອາດຈະສະຫລຸບຫລັກການພື້ນຖານຂອງສາສະໜາພຸດໄດ້ ວ່າການທີ່ຄົນມີຄວາມທຸກທໍລະມານນັ້ນ ກໍ່ຍ້ອນຄົນເປັນຜູ້ມີຄວາມຜິດເອງ, ແຕ່ຫາກບໍ່ແມ່ນຍ້ອນເງື່ອນໄຂທາງສັງຄົມ.

ຜົນສຳເລັດຂອງວິທະຍາສາດ ແລະ ກ່ອນອື່ນໝົດ ແມ່ນວິທະຍາສາດທຳມະຊາດໄດ້ນຳໄປເຖິງການເສື່ອມໂຊມຢ່າງເຕັມສ່ວນຂອງສາສະໜາ ຢູ່ໃນໂລກ. ເມື່ອບໍ່ສາມາດປົກປັກຮັກສາທັດສະນະກ່ຽວກັບໂລກເວົ້າລວມ ທີ່ ພວກສາສະໜາໄດ້ສ້າງຂຶ້ນມາແລ້ວ, ສາສະໜາໄດ້ເນັ້ນໜັກທິດສະດີຂອງ ຕົນເຂົ້າໃສ່ຂົງເຂດສິນທຳ ແລະ ສັງຄົມ. ການຕໍ່ສູ້ທາງດ້ານແນວຄິດ ລະຫວ່າງໂລກະທັດທີ່ມີວິທະຍາສາດ ແລະ ໂລກະທັດຂອງສາສະໜາໄດ້ເນັ້ນໜັກ ໃສ່ຂົງເຂດການອະທິບາຍບັນດາກົດເກນຂະຫຍາຍຕົວຂອງສັງຄົມ, ບັນຫາຄົນ, ອຸດົມຄະຕິທາງສັງຄົມ ແລະ ສິນທຳຂອງຄົນ ແລະ ອື່ນໆ.

ເພື່ອຕ້ານກັບລັດທິກອມມູນິດ ວິທະຍາສາດ, ໃນສະຕະວັດທີ ໑໙ ໄດ້ເກີດມີ "ສັງຄົມນິຍົມ ຄຣິດສາສະໜາ". ໃນໄລຍະກວ່າໜຶ່ງສະຕະວັດແລ້ວທີ່ "ສັງຄົມນິຍົມ ຄຣິດສາສະໜາ" ຝ່າຍຂວາໄດ້ຮຽກຮ້ອງໃຫ້ມະຫາຊົນ ຈົ່ງປະຕິເສດວິທີການຕໍ່ສູ້ປະຕິວັດ, ບໍ່ໃຫ້ຕ້ານທຶນນິຍົມ. ແຕ່ໃນປະຈຸບັນນີ້ກຳລັງ

ຝ່າຍຊ້າຍໃນ ຄຣິດສາສະໜາ ໄດ້ເພີ່ມທະວີອິດທິພົນຂອງຕົນຂຶ້ນ, ກຳລັງຝ່າຍນີ້ໄດ້ໝູນໃຊ້ທິດສະດີສາສະໜາເພື່ອພະຍາຍາມພິສູດ ຄວາມຈຳເປັນຕ້ອງດັດສ້າງໂລກຄືນໃໝ່. ແຕ່ພວກເຂົາເຈົ້າຖືວ່າ ການດັດສ້າງຄືນໃໝ່ນີ້ ບໍ່ແມ່ນການຕໍ່ສູ້ຂອງມະຫາຊົນ ເພື່ອອະນາຄົດທີ່ດີກວ່າເກົ່າ, ຫາກແມ່ນບັນຕາສ່ວນ-ບຸກຄົນຕ້ອງປັບປຸງຄຸນສົມບັດຂອງຕົນເອງໃຫ້ດີຂຶ້ນ, ດັ່ງທີ່ພວກສາສະໜາ ຖືແຮງວ່າ ເປັນພົນຖານແຫ່ງຄວາມກ້າວໜ້າທາງສັງຄົມ. ດັ່ງນີ້ ໃນທາງ ປັດຊະຍາ ຝ່າຍສາສະໜາຍັງຄົງສືບຕໍ່ຢືນຢູ່ໃນທັດສະນະຈິດຕະນິຍົມ.

ຊາວກອມມູນິດຢືນຢູ່ໃນທັດສະນະ ລັດທິອະເທບ* ທີ່ມີວິທະຍາສາດ. ລັດທິມາກ-ເລນິນ ຖືວ່າ ບໍ່ອາດຈະ ຕີຖອຍສະຕິສາສະໜາດ້ວຍວິທີທາງ ເກືອດຫ້າມ, ວິທີຮຸນແຮງ, ແລະ ວິທີໃຊ້ມາດຕາການປົກຄອງໄດ້. ບັນດາມາດຕາການດັ່ງກ່າວ ມີແຕ່ຈະຍູແຍ່ໃຫ້ມີການເຊື່ອຖືສາສະໜາແບບຫຼົງໄຫລເທົ່ານັ້ນ. ໃນຖານະເປັນຜູ້ທີ່ບໍ່ເຊື່ອຖືພະເຈົ້າແລ້ວ, ບັນດານັກລັດທິມາກຫລີກເວັ້ນບໍ່ເຮັດໃຫ້ກະທົບກະເທືອນຄວາມຮູ້ສຶກຂອງຜູ້ທີ່ເຊື່ອຖື. ບັນດາພັກກອມມູນິດບໍ່ມີທ່າ ທີປະນີປະນອມ ແລະ ກໍ່ບໍ່ມີທ່າທີເກືອດຫ້າມສາສະໜາ. ບັນດາພັກກອມມູນິດບໍ່ແຍກການແກ້ໄຂບັນຫາສາສະໜາອອກຈາກໜ້າທີ່ພື້ນຖານດ້ານ ການເມືອງ ແລະເສດຖະກິດຂອງຊົນຊັ້ນກຳມະກອນ. ການເຂົ້າຮ່ວມໃນການດັດສ້າງໂລກແບບປະຕິວັດ ຊຸກຍູ້ໃຫ້ບັນດາຜູ້ເຂົ້າຮ່ວມທີ່ຫ້າວຫັນໃຫ້ມີຄວາມເຂົ້າໃຈແບບວັດຖຸນິຍົມ ຕໍ່ບັນດາກົດເກນຂະຫຍາຍຕົວ ຂອງສັງຄົມ, ຕໍ່ຈຸດປະສົງ ແລະພາລະໜ້າທີ່ຂອງຄົນໃນໂລກນີ້.

*) ລັດທິອະເທບ ແມ່ນແນວຄິດທີ່ບໍ່ເຊື່ອວ່າມີພະເຈົ້າຢູ່ໃນໂລກ.

## ພາກທີ ແປດ

### ປະຊາຊົນ ແມ່ນຜູ້ສ້າງປະຫວັດສາດ

ບັນຫາກ່ຽວກັບບົດບາດຂອງມະຫາຊົນ ໃນປະຫວັດສາດ ແມ່ນເປົ້າຫມາຍຂອງການຕໍ່ສູ້ດ້ານແນວຄິດທີ່ດຸເດືອດລະຫວ່າງພວກລັດທິມາກ-ເລນິນກັບ ສັດຕູຂອງເຂົາເຈົ້າ. ຜູ້ທີ່ປົກປ້ອງຜົນປະໂຫຍດຂອງບັນດາຊົນຊັ້ນກົດຂີ່ຂູດຮີດເວລາໃດກໍ່ໄດ້ພະຍາຍາມ ແລະ ພວມພະຍາຍາມຢຸບຢອບບົດບາດຂອງຊາວ ຜູ້ອອກແຮງງານ. ໃນຜົນສຸດທ້າຍຄວາມພະຍາຍາມຂອງພວກເຂົາ ກໍ່ແມ່ນ ແນໃສ່ເພື່ອພິສູດຄວາມມີເຫດຜົນ ແລະ ປົກປ້ອງການທີ່ຄົນຂູດຮີດຄົນ. ກົງກັນ ຂ້າມກັບພວກເຂົາ ລັດທິມາກ-ເລນິນ ໄດ້ວາງຂໍ້ວິນິດໄສອອກວ່າ ປະຊາຊົນ ແມ່ນກຳລັງຕົ້ນຕໍຂອງປະຫວັດສາດ, ມີບົດບາດຕັດສິນຊີ້ຂາດໃນການຂະຫຍາຍ ຕົວຂອງສັງຄົມ. ຊາວຜູ້ອອກແຮງງານເປັນຜູ້ສ້າງໂຊກຊາຕາຂອງຕົນເອງ.

ບໍ່ມີຜູ້ໃດຈະມາປົດປ່ອຍພວກເຮົາ.<br>
ບໍ່ແມ່ນພະເຈົ້າ, ບໍ່ແມ່ນເຈົ້າຊາ ແລະ ກໍບໍ່ແມ່ນວິລະຊົນ,<br>
ພວກເຮົາຈະບັນລຸການປົດປ່ອຍ<br>
ດ້ວຍມືຂອງຕົນເອງ.

ເນື້ອຮ້ອງດັ່ງກ່າວຂອງເພງຂອງນັກກອມມູນິດ "ສາກົນ" ນີ້ສະແດງເຖິງຄວາມມຸ່ງຫວັງໃນຫລາຍສະຕະວັດມາແລ້ວ ຂອງຊາວຜູ້ອອກແຮງງານ ທີ່ຢາກປົດປ່ອຍຕົນເອງຈາກ ການກົດຂີ່ຂູດຮີດ, ຢາກມີສິດທິໃນການຕັດສິນໂຊກ ຊາຕາຂອງຕົນ. ຊາວຜູ້ອອກແຮງງານໃນບັນດາປະເທດສັງຄົມນິຍົມໄດ້ ປົດປ່ອຍຕົນເອງອອກຈາກການກົດຂີ່ຂູດຮີດແລ້ວ ແລະ ໄດ້ກາຍເປັນເຈົ້າຂອງຊີວິດຕົນເອງຢ່າງເຕັມປ່ຽມ. ສ່ວນປະຊາຊົນບັນດາປະເທດທີ່ດຳເນີນຊີວິດໃນເງື່ອນໄຂທີ່ມີການກົດຂີ່ຂູດຮີດນັ້ນ ຍັງຕ້ອງດຳເນີນການຕໍ່ສູ້ຢ່າງທໍລະຫົດອົດທົນ ເພື່ອ

ສິດທິໃນການກໍ່ສ້າງຊີວິດຂອງຕົນ ໂດຍປາສະຈາກການບີບບັງຄັບ ແລະ ກົດຂີ່ຂົ່ມເຫັງ.

## ໑. ວ່າດ້ວຍຄວາມຮູ້ກ່ຽວກັບ "ປະຊາຊົນ","ມະຫາຊົນ".

ກ່ອນທີ່ລັດທິມາກ ໄດ້ປະກົດຕົວຂຶ້ນມາ ມັກມີການຕີກວາດລວາດ ພຽງຄວາມຮູ້ກ່ຽວກັບ "ປະຊາຊົນ" ກັບຄວາມຮູ້ກ່ຽວກັບ "ຝູງຄົນ", ໝາຍຄວາມວ່າ ແມ່ນຝູງຊົນທີ່ບໍ່ຮູ້ວັດທະນະທຳ ແລະ ຖືກຂົ່ມຂູ່ ເຊິ່ງມີໜ້າທີ່ຕ້ອງ ເດີນຕາມບັນດາບຸກຄົນທີ່ຍິ່ງໃຫຍ່ຢ່າງງົມງາຍ. ເຊັ່ນຕົວຢ່າງ, ເຮເກນ ໄດ້ຂຽນວ່າ ປະຊາຊົນແມ່ນສ່ວນໜຶ່ງໃນຈຳນວນສະມາຊິກຂອງລັດ, "ທີ່ບໍ່ຮູ້ວ່າ ຕົນຢາກໄດ້ຫຍັງ".

ກ.ມາກ ແລະ ຟ.ອັງແກນ ໄດ້ໄຈ້ແຍກຄວາມຮັບຮູ້ອັນເປັນປະຫວັດ - ສາດ ຕົວຈິງກ່ຽວກັບ "ປະຊາຊົນ" ຢ່າງມີວິທະຍາສາດເປັນຄັ້ງທຳອິດ. ພື້ນຖານການຕັດສິນບັນຫາກ່ຽວກັບບົດບາດຂອງມະຫາຊົນໃນປະຫວັດສາດນັ້ນແມ່ນທິດສະດີກ່ຽວກັບຄວາມເຂົ້າໃຈແບບວັດຖຸນິຍົມ ກ່ຽວກັບປະຫວັດສາດ, ກ່ຽວກັບການຜະລິດວັດຖຸພື້ນຖານຂອງການຄົງຢູ່ ແລະ ການຂະຫຍາຍຕົວຂອງສັງຄົມ. ທິດສະດີກ່ຽວກັບມະຫາຊົນ ເປັນຄືກຳລັງທີ່ຕັດສິນຊີ້ຂາດຂອງການຂະຫຍາຍຕົວດ້ານສັງຄົມ ປະກອບເປັນໜຶ່ງໃນຈຳນວນດ້ານທີ່ສຳຄັນທີ່ສຸດ ຂອງທິດສະດີລັດທິມາກ.

ລັດທິມາກ-ເລນິນ ໄຈ້ແຍກປະຊາຊົນແຕ່ລະຊາດໃນການຂະຫຍາຍ ຕົວດ້ານປະ ຫວັດສາດຂອງພວກເຂົາເຈົ້າ ແລະ ໄດ້ຊີ້ແຈງວ່າ ໃນໄລຍະ ປະຫວັດສາດຕ່າງໆ ຄວາມຮູ້ນັ້ນມີເນື້ອໃນແຕກຕ່າງກັນ. ສຳລັບສັງຄົມປະຖົມ ບູຮານ ໃນເມື່ອບໍ່ທັນມີຊົນຊັ້ນເທື່ອນັ້ນ ຄວາມເວົ້າ "ປະຊາຊົນ" ໝາຍ ເຖິງພົນລະເມືອງທັງປວງ. ໃນເງື່ອນໄຂສັງຄົມນິຍົມ ພາຍຫລັງທີ່ໄດ້ລົບລ້າງ ບັນດາຊົນຊັ້ນຂອງພວກກົດຂີ່ຂູດຮີດແລ້ວ, ຄຳເວົ້າ "ປະຊາຊົນ" ໝາຍເຖິງພົນລະເມືອງທັງປວງ ເຊັ່ນດຽວກັນ. ແຕ່ລັດທິມາກປະຕິເສດຢ່າງເດັດ ຂາດແນວຄິດກ່ຽວກັບປະຊາຊົນເປັນເອກະພາບກັນໃນເງື່ອນໄຂມີຜູ້ກົດຂີ່ຂູດຮີດແລະ

ຜູ້ຖືກກົດຂີ່ຂູດຮີດ. ຕາມຄວາມເວົ້າຂອງ ເລນິນ ແລ້ວ ກ.ມາກ ໄດ້ຕໍ່ສູ້ຢ່າງບໍ່ປະນີປະນອມຕ້ານ ທັດສະນະນາຍທຶນນ້ອຍ ກ່ຽວກັບຄວາມ ເປັນເອກະພາບຂອງປະຊາຊົນ ໃນເງື່ອນໄຂທຶນນິຍົມ. ເລນິນ ໄດ້ຂຽນວ່າ "ມາກນຳໃຊ້ຄຳເວົ້າ "ປະຊາຊົນ" ໂດຍບໍ່ໃຊ້ຄຳນັ້ນເພື່ອລຶບລ້າງ ຄວາມແຕກຕ່າງກັນ ລະຫວ່າງບັນດາຊົນຊັ້ນ..." ທ່ານຍັງໄດ້ເຕືອນບໍ່ໃຫ້ໃຊ້ຄຳເວົ້າ "ປະຊາຊົນ " "ເພື່ອມາປົກປິດຄວາມບໍ່ເຂົ້າໃຈຕໍ່ລັກສະນະປໍລະປັກກັນລະຫວ່າງບັນດາ ຊົນຊັ້ນ" ໑)

ໂດຍເສີມຂະຫຍາຍທິດສະດີຂອງ ກ.ມາກ, ເລນິນ ໄດ້ພິສູດວ່າ ຈະເວົ້າເຖິງປະຊາຊົນ, ເວົ້າເຖິງມະຫາຊົນຢ່າງລວມໆ ແມ່ນບໍ່ໄດ້. ໃນສັງຄົມທີ່ມີຊົນຊັ້ນ ປະຊາຊົນປະກອບດ້ວຍບັນດາຊົນຊັ້ນທີ່ແຕກຕ່າງກັນ. ແຕ່ລະຊົນຊັ້ນມີຜົນປະໂຫຍດສະເພາະ ແລະ ເອກະເທດຂອງຕົນ ທີ່ບັນດາພັກ ແລະ ຜູ້ນຳຕ້ອງໄດ້ຄຳນຶງເຖິງ, ຖ້າຫາກພັກ ແລະ ຜູ້ນຳ ເຫລົ່ານັ້ນມີຈຸດປະສົງຢາກ ນຳພາບັນດາຊົນຊັ້ນດັ່ງກ່າວ.

ຖ້າຫາກຢືນຢູ່ໃນທັດສະນະປະຫວັດສາດຕົວຈິງ ກ່ຽວກັບຄວາມຮູ້ ກ່ຽວກັບ "ປະຊາຊົນ" ແລ້ວ, ແມ່ນວ່າບໍ່ສາມາດຈະຕອບຄຳຖາມກ່ຽວກັບບັນຫາທີ່ນາຍທຶນນອນຢູ່ໃນຈຳນວນ "ປະຊາຊົນ" ຫລືບໍ່ນັ້ນໄດ້ຢ່າງຂາດຕົວ. ໃນເມື່ອນາຍທຶນຍັງເປັນກຳລັງທີ່ກ້າວໜ້າຢູ່ ມັນນອນຢູ່ໃນຄວາມຮູ້ກ່ຽວກັບປະຊາຊົນຢ່າງບໍ່ຕ້ອງສົງໄສເລີຍ. ຫລັງຈາກນັ້ນ ໃນເມື່ອມັນໄດ້ກາຍເປັນຊົນຊັ້ນທີ່ປະຕິ ການແລ້ວ, ມີແຕ່ນາຍທຶນນ້ອຍເທົ່ານັ້ນ ຍັງມີສິດຖືວ່າຕົນປະກອບເປັນ "ປະຊາຊົນ" ນາຍທຶນແຫ່ງຊາດທີ່ຮ່ວມກັນກັບຊາວຜູ້ອອກແຮງງານ ດຳເນີນການຕໍ່ສູ້ເພື່ອປົດປ່ອຍປະເທດອອກຈາກແອກປົກຄອງຂອງລັດທິລ່າເມືອງຂຶ້ນນັ້ນ ກໍ່ປະກອບເປັນ "ປະຊາຊົນ" ເຊັ່ນດຽວກັນ. ເມື່ອເຖິງຄາວ ທີ່ນາຍທຶນລຸກຂຶ້ນຕ້ານກັບປະຊາຊົນຂອງຕົນເອງແລ້ວ, ມັນກໍ່ບໍ່ມີສິດເອີ້ນຕົນເອງເປັນປະຊາຊົນ.

ເພາະສະນັ້ນ ປະຊາຊົນແມ່ນຊົມລົມ ລະຫວ່າງບັນດາຊົນຊັ້ນ ແລະຊັ້ນຄົນຕ່າງໆໃນສັງຄົມ ທີ່ປ່ຽນແປງໄປຕາມໄລຍະປະຫວັດສາດ, ແລະ ໃນໄລຍະທີ່ແນ່ນອນ ກໍ່ປະຕິບັດໜ້າທີ່ແຫ່ງການຂະຫຍາຍຕົວກ້າວໜ້າຂອງສັງຄົມ. ພົນ

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໑໑, ໜ້າ ໑໔໘, ໑໐໔.

ຖານອັນເປັນແກ່ນສານຂອງປະຊາຊົນ ໃນຊົ່ວໄລຍະປະຫວັດສາດ, ໃນທຸກ ໆ ເວລານັ້ນ ແມ່ນຊາວຜູ້ອອກແຮງງານ ທີ່ປະກອບເປັນສ່ວນໃຫຍ່ຂອງ ພົນລະເມືອງໃນຮູບຖານຈັດຕັ້ງ ທີ່ມີຄວາມເປັນປໍລະປັກກັນ ແລະ ແມ່ນພົນລະເມືອງທັງປວງໃນສັງຄົມກ່ອນການກຳເນີດຂອງຊົນຊັ້ນ ແລະ ສັງຄົມກອມມູນິດນິຍົມ.

## ໒. ບົດບາດຂອງປະຊາຊົນເປັນຜູ້ສ້າງປະຫວັດສາດ

ປະຊາຊົນ ແມ່ນກຳລັງແຫ່ງການຜະລິດ ຕົ້ນຕໍຂອງສັງຄົມ, ແມ່ນ ກຳລັງສັງຄົມ-ການເມືອງ ທີ່ເປັນພື້ນຖານຂອງສັງຄົມ, ແມ່ນຜູ້ປະດິດສ້າງວັດທະນະທຳດ້ານຈິດໃຈ.

ປະຊາຊົນເປັນກຳລັງແຫ່ງການຜະລິດຕົ້ນຕໍຂອງສັງຄົມ ກໍຍ້ອນວ່າຄົນ ໃຊ້ແຮງງານຂອງຕົນເພື່ອດຳເນີນການຜະລິດ, ປັບປຸງມັນໃຫ້ດີຂຶ້ນ. ພວກ ເຂົາເຈົ້າປະດິດສ້າງເຄື່ອງມືການຜະລິດ, ກໍສ້າງເຮືອນຢູ່, ທາງລົດໄຟ, ຂຸດຄົ້ນຊັບພະຍາກອນທຳມະຊາດ, ຜະລິດເຄື່ອງໃຊ້ສອຍ. ວິທະຍາສາດ, ເຕັກນິກ, ສິລະປະກຳ, ວັດທະນະທຳທັງໝົດຂອງມວນມະນຸດ ລ້ວນແຕ່ໄດ້ຮັບການ ຂະຫຍາຍຕົວຂຶ້ນ ບົນພື້ນຖານແຮງງານຂອງມະຫາຊົນຊາວຜູ້ອອກແຮງງານ. ໃນຂະບວນວິວັດແຫ່ງການອອກແຮງງານ, ກະໂຕລົນເອງ, ມື, ມັນສະໝອງ-ຂອງຄົນ ກໍໄດ້ຮັບການເສີມຂະຫຍາຍ. ພາສາຄວາມເວົ້າ ແລະ ຈິນຕະນາ-ການກໍໄດ້ຮັບການຂະຫຍາຍຕົວ. ທຸກສິ່ງເຫລົ່ານີ້ໄດ້ພິສູດວ່າ ປະຫວັດສາດຂອງສັງຄົມ ກ່ອນອື່ນ ໝົດແມ່ນປະຫວັດສາດແຫ່ງການອອກແຮງງານ ແລະມະຫາຊົນຊາວຜູ້ອອກແຮງງານ.

ແຮງງານຂອງຂ້າທາດ ໄດ້ກໍ່ສ້າງບັນດາຕົວເມືອງຂອງໂລກສະໄໝ ບູຮານ, ທາດປີຣາມິດ ຢູ່ ເອຢິບ, ນ້ຳປະປາຂອງຊາວ ໂຣແມງ, ລະບົບຊົນລະປະທານໃນບັນດາປະເທດຕາເວັນອອກສະໄໝບູຮານ, ວັດວາອາຮາມ,ຫໍຜາສາດ ແລະ ສວນອຸດທິຍານທີ່ໜ້າມະຫັດສະຈັນສຳລັບຊົນຊັ້ນເຈົ້າທາດຊາວນາທີ່ເປັນທາດໄດ້ກໍ່ສ້າງຫໍຜາສາດ, ພະລາຊະວັງ, ວັດວາອາຮາມທີ່ສວຍສົດງົດງາມ ສຳລັບພະສົງໃນສາສະໜາ ແລະ ສັກດິນາ. ຖາວອນວັດຖຸທາງປະ

ຫວັດສາດຂອງລາວເຊັ່ນໄຫຫີນ, ທາດອິງຮັງ ຢູ່ສະຫວັນນະເຂດ ແລະອື່ນໆ, ວັດວາອາຣາມ ລ້ວນແລ້ວແຕ່ແມ່ນແຮງງານຂອງປະຊາຊົນເປັນຜູ້ສ້າງຂຶ້ນ ທັງໝົດ. ໃນຍຸກສະໄໝທຶນນິຍົມ ຊາວກຳມະກອນໄດ້ກໍ່ສ້າງບັນດາຕົວເມືອງຊຸດສາທະກຳທີ່ໃຫຍ່ໂຕມະໂຫລານ, ຂຸດຄອງເໝືອງ, ສ້າງທາງລົດໄຟ, ສ້າງກຳປັ່ນ, ກໍ່ສ້າງໂຮງຈັກໂຮງງານ, ບໍ່ແຮ່, ສະຖານີໄຟຟ້າ.

ແຕ່ໃນເງື່ອນໄຂ ຮູບຖານຈັດຕັ້ງ ທີ່ມີຄວາມເປັນປໍລະປັກກັນ ຊັບສິນ ບັດທຸກຢ່າງ ອັນທີ່ເປັນໝາກຜົນການອອກແຮງງານຂອງປະຊາຊົນລ້ວນແຕ່ ເປັນຂອງບັນດາຊົນຊັ້ນປົກຄອງ. ມີແຕ່ສັງຄົມນິຍົມເທົ່ານັ້ນ ທີ່ເຮັດໃຫ້ຄົນຜູ້ທີ່ຜະລິດຊັບສິນວັດຖຸທຸກຢ່າງ ໝາຍຄວາມວ່າ ຄົນຜູ້ອອກແຮງງານນັ້ນເອງກາຍ ເປັນເຈົ້າຂອງຊັບສິນວັດຖຸດັ່ງກ່າວ.

ບົດບາດຂອງປະຊາຊົນໃນຊີວິດສັງຄົມ-ການເມືອງນັ້ນ ໃຫຍ່ຫລວງທີ່ສຸດ. ປະຊາຊົນແມ່ນກຳລັງຕົ້ນຕໍຂອງການປະຕິວັດສັງຄົມ, ຂອງທຸກໆຂະບວນ ການປົດປ່ອຍຊາດ. ຖ້າບໍ່ມີບົດບາດຕັດສິນຊີ້ຂາດຂອງມະຫາຊົນແລ້ວ ກໍ່ຈະບໍ່ມີເຫດການປະຫວັດສາດທີ່ສຳຄັນ ແມ່ນແຕ່ເຫດການດຽວ. ທ່ານໄກສອນ ພົມວິຫານ ຂຽນວ່າ: "ກຳລັງການເມືອງຂອງມະຫາຊົນ ແມ່ນກຳລັງຂອງທົ່ວປວງຊົນ ທີ່ເຂົ້າຮ່ວມການຕໍ່ສູ້ປະຕິວັດຢ່າງມີການຈັດຕັ້ງ, ປະກອບດ້ວຍບັນດາຊົນຊັ້ນປະຕິວັດ ແລະຊັ້ນຄົນໃນໝູ່ປະຊາຊົນ ທີ່ຮັກຊາດ, ກ້າວໜ້າ ສັງກັດໃນບັນດາຊົນຊາດທີ່ໄດ້ເຕົ້າໂຮມເຂົ້າໃນແນວໂຮມເອກະພາບແຫ່ງຊາດອັນກວ້າງຂວາງ , ໂດຍເອົາພັນທະພາບກຳມະກອນ-ຊາວນາ ເປັນພື້ນຖານ ພາຍໃຕ້ການນຳພາຂອງພັກ." ໑)

ບົດບາດຂອງມະຫາຊົນ ໃນການຂະຫຍາຍຕົວດ້ານການເມືອງຂອງສັງຄົມ ມີການປ່ຽນແປງໂດຍຂຶ້ນກັບການປ່ຽນແທນວິທີການຜະລິດ. ໃນສັງຄົມຂ້າທາດ, ຊົນຊັ້ນພື້ນຖານຂອງຜູ້ຜະລິດ ທີ່ອອກແຮງງານເພື່ອຄ້ຳຊູຊີວິດຂອງທົ່ວທັງສັງຄົມນັ້ນ ບໍ່ມີສິດທິທາງພົນລະເມືອງ ແລະ ທາງການເມືອງ ແຕ່ປະການໃດ. ໃນສັງຄົມສັກດີນາຊາວນາກໍ່ໄຮ້ສິດທິເຊັ່ນດຽວກັນ. ໃນເງື່ອນໄຂທຶນນິຍົມໃນການ

---

໑) ໄກສອນ ພົມວິຫານ. ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ ໜ້າ ໑໗໘.

ຕໍ່ສູ້ຢ່າງທົນທານຕ້ານກັບພວກນາຍທຶນ ກຳມະກອນຍາດເອົາສິດທິ ທາງການເມືອງ ແລະ ເສດຖະກິດຈຳນວນໜຶ່ງ ເຊັ່ນ ສິດທິເລືອກຕັ້ງທົ່ວໄປ, ສິດທິ-ຈັດຕັ້ງກຳມະບານ, ໄດ້ຮັບສິດທິໃນການຢຸດງານ ແລະ ແຫ່ຂະບວນ, ວັນງານທີ່ມີຂອບເຂດຈຳກັດ ແລະ ສິດທິດ້ານການປະກັນໄພສັງຄົມ.ແຕ່ນາຍ ທຶນພະຍາຍາມຢາກຈຳກັດ ແລະ ຕັດສິດທິດັ່ງກ່າວຂອງຊາວຜູ້ອອກແຮງງານດ້ວຍຫຼາຍວິທີທາງ.

ໃນສັງຄົມທີ່ມີຄວາມເປັນປໍລະປັກກັນ ມະຫາຊົນຊາວຜູ້ອອກແຮງງານ ຖືກຊົນຊັ້ນປົກຄອງກົດຂີ່ຂູດຮີດ, ໜີບເຕັງ ທາງດ້ານຊົນຊັ້ນ, ຕົກຢູ່ໃນ ຖານະທຸກຍາກຂາດເຂີນ ແລະ ຖືກຂົ່ມເຫັງບັງບຽດ. ຫາກແຕ່ອັນນີ້ບໍ່ໝາຍຄວາມ-ວ່າ ພວກເຂົາເຈົ້າບໍ່ສາມາດຈະປະກອບສ່ວນເຂົ້າໃນການຂະຫຍາຍຕົວ ດ້ານການເມືອງຂອງສັງຄົມ. ເຊັ່ນຕົວຢ່າງ, ລະບອບຂ້າທາດຢູ່ຈີນ, ອິນເດຍ , ເອຢິບ, ໂຣມ ແລະ ອື່ນໆ ໃນສະໄໝບູຮານນັ້ນ ລ້ວນແຕ່ ຖືກໂຄ່ນລົ້ມ ລົງຍ້ອນການລຸກຮືຂຶ້ນຂອງຂ້າທາດ, ຊາວນາ ແລະ ຊົນຊາດທີ່ຖືກບີບບັງຄັບ ໃຫ້ເປັນຂ້າທາດ. ຍຸກສະໄໝສັກດີນາເຕັມໄປດ້ວຍການຕໍ່ສູ້ຕ້ານສັກດີນາ ໂດຍຊາວນາທີ່ເປັນບ່າວນາ ແລະ ເປັນທາດ ແລະ ປະຊາຊົນໃນຕົວເມືອງທີ່ ຖືກກົດຂີ່ຂົ່ມເຫັງ. ການລຸກຮືຂຶ້ນຂອງຊາວນາຖືກປາບປາມຢ່າງຮ້າຍກາດແຕ່ເຖິງຢ່າງໃດກໍ່ຕາມ ການຕໍ່ສູ້ດັ່ງກ່າວໄດ້ນຳໄປເຖິງການປ່ຽນແທນທີ່ໃຫຍ່ຫລວງໃນລະບອບການສັງຄົມ ແລະ ລັດ. ການຕໍ່ສູ້ຂອງບັນດາຊົນຊັ້ນທີ່ຖືກກົດຂີ່ຂົ່ມເຫັງເພື່ອປົດປ່ອຍຕົນເອງໄດ້ບັນລຸລະດັບສູງທີ່ສຸດໃນເງື່ອນໄຂທຶນນິຍົມ. ການຕໍ່ສູ້ນີ້ຈະນຳໄປເຖິງການດັບສູນສັງຄົມທີ່ມີການກົດຂີ່ຂູດຮີດ ແລະ ຂົ່ມເຫັງ ແລະ ກໍ່ສ້າງລະບອບສັງຄົມໃໝ່ ເຊິ່ງໃນນັ້ນ ຊາວຜູ້ອອກແຮງງານຈະເປັນຜູ້ຄຸ້ມຄອງຫຼາຍວຽກງານໃນຊີວິດເສດຖະກິດ, ການເມືອງ ແລະ ວັດທະນະທຳ.

ມະຫາຊົນຊາວຜູ້ອອກແຮງງານ ແມ່ນກຳລັງຕົ້ນຕໍຂອງຂະບວນການ ປົດປ່ອຍຊາດ. ຜົນສຳເລັດ ແລະ ໄຊຊະນະຂອງຂະບວນການດັ່ງກ່າວຂຶ້ນກັບບັນຫາມະຫາຊົນຈະເຂົ້າຮ່ວມໃນຂະບວນການນີ້ຢ່າງຕັ້ງໜ້າພຽງໃດ ແລະ ກ່ອນອື່ນໝົດ ຂຶ້ນກັບບັນຫາຜູ້ຈັດຕັ້ງ ແລະ ນຳພາຂະບວນການນີ້ແມ່ນຊົນຊັ້ນກຳມະກອນ.

ມະຫາຊົນບໍ່ພຽງແຕ່ແມ່ນກຳລັງແຮງການຜະລິດ ແລະ ການເມືອງທີ່ຕົ້ນຕໍ

ຂອງການຂະຫຍາຍຕົວຂອງສັງຄົມເທົ່ານັ້ນ, ແຕ່ຍັງແມ່ນຜູ້ປະດິດສ້າງ ວັດທະນະທຳດ້ານຈິດໃຈນຳອີກ. ບັນດານັກແນວຄິດນາຍທຶນ ບໍ່ຍອມຮັບວ່າປະຊາຊົນມີຄວາມສາມາດປະດິດສ້າງວິທະຍາສາດ, ວັນນະຄະດີ ແລະ ສິລະປະກຳ. ພວກເຂົາຢືນຢັນວ່າ ຜູ້ທີ່ເສີມຂະຫຍາຍວິທະຍາສາດ, ວັນນະຄະດີ ແລະສິລະປະກຳ ແມ່ນຜູ້ມີຄວາມປີຊາສາມາດ, "ຜູ້ຍອດຢ້ຽມ", ລູກຫລານຂອງບັນດາຊົນຊັ້ນປົກຄອງ. ແຕ່ຊີວິດເອງໄດ້ປະຕິເສດຄວາມເສກສັນປັ້ນແຕ່ງດັ່ງກ່າວ. ອັງແກນ ຍັງເຄີຍຂຽນວ່າ ຄວາມຕ້ອງການທີ່ປະກົດຂຶ້ນໃນສັງຄົມ ຍູ້ຫນູນວິທະຍາສາດໄວກວ່າມະຫາວິທະຍາໄລເປັນສິບແຫ່ງພຸ້ນ. ການຜະລິດໄດ້ສ້າງ ທັງເງື່ອນໄຂ, ສ້າງທັງພາຫະນະສຳລັບການຂະຫຍາຍຕົວຂອງວິທະຍາສາດແລະກຳນົດຫນ້າທີ່ຂອງມັນ. ທຸກໆຜົນສຳເລັດທາງດ້ານວິທະຍາສາດ ແລະເຕັກນິກອັນໃຫມ່ສຸດ, ເຊັ່ນການຄົ້ນພົບພະລັງງານປະລະມານູ, ການປະດິດສ້າງ ໂທລະທັດ, ສະຫມອງກົນ ແລະ ອື່ນໆນັ້ນໃນສຸດທ້າຍລ້ວນແລ້ວແຕ່ໄດ້ເກີດຂຶ້ນມາຍ້ອນການຜະລິດຂະຫນາດໃຫຍ່ ແລະ ທັນສະໄຫມທີ່ໄດ້ຮັບການຂະຫຍາຍຕົວ. ສະນັ້ນ ການເຄື່ອນໄຫວດ້ານການຜະລິດຂອງມະຫາຊົນຊາວຜູ້ອອກແຮງ ງານແມ່ນກົກເຫງົ້າທີ່ມີຊີວິດຊີວາຢ່າງເລິກເຊິ່ງທີ່ສຸດ ແລະ ເປັນພື້ນຖານໃຫ້ ແກ່ການຂະຫຍາຍຕົວດ້ານວິທະຍາສາດ. ແຕ່ແນວໃດກໍຕາມ ມັນບໍ່ຢຸບຢອບ ບົດບາດຂອງນັກວິທະຍາສາດ ແລະ ນັກປະດິດສ້າງບາງຄົນ ທີ່ດີເດັ່ນເລີດໃນການຂະຫຍາຍຕົວດ້ານວິທະຍາສາດ ແລະ ເຕັກນິກ.

ໃນເງື່ອນໄຂສັງຄົມອ້າຫາດ, ສັກດີນາ ແລະ ທຶນນິຍົມ ວຽກງານດ້ານວິທະຍາສາດ ແລະ ສິລະປະກຳແມນອະພິສິດຂອງບັນດາຊົນຊັ້ນທີ່ຮັ່ງມີ ແລະກົດຂີ່ຂູດຮີດ. ແຕ່ເຖິງຢ່າງໃດກໍຕາມ ລູກຫລານຂອງມະຫາຊົນໄດ້ກາຍເປັນ ນັກປາດຜູ້ດີເດັ່ນເລີດ, ນັກປະດິດສ້າງ, ນັກສິລະປະກຳ ແລະ ນັກກະວີທີ່ຍິ່ງໃຫຍ່ ເຊັ່ນ ມ.ໂລໂມໂນຊົບ ນັກປາດລັດເຊຍຜູ້ຍິ່ງໃຫຍ່ ແມ່ນລູກຊາຍຂອງຊາວຫາປາ, ຟາຣາໄດ ນັກຟີຊິກ ຊາວອັງກິດຜູ້ເລີດລ້ຳ ແມ່ນລູກຊາຍຂອງຊ່າງ ຕີເຫລັກ, ຜູ້ປະດິດສ້າງຫົວລົດໄຟຊາວອັງກິດ ຈອດ ສະຕີເຟນເຊິນ ແມ່ນ ລູກຊາຍຂອງກຳມະກອນຕົ້ມຖ່ານ ແລະ ໃນສະໄຫມຍັງຫນຸ່ມທ່ານເອງກໍເຄີຍເປັນກຳມະກອນ. ຜູ້ປະດິດຈັກພິມປັ້ມ ກູເຕນແບກ ເຄີຍເປັນນັກຝົນແກ້ວ.ອາດຈະເພີ່ມຊື່ຂອງບັນດາຜູ້ຄົນທີ່ດີເດັ່ນເລີດຈາກທຸກໆປະເທດໃນໂລກ, ຜູ້ທີ່ເປັນ ລູກ

ຫລາຍຂອງປະຊາຊົນນັ້ນເຂົ້າໃນບັນຊີນີ້ກໍຍັງໄດ້ ຕື່ມອີກ.

ສິລະປະກຳກໍ່ໄດ້ປະກົດຂຶ້ນ ມາຈາກການເຄື່ອນໄຫວອອກແຮງງານ ຂອງຄົນ. ບົດເພງ, ຈັງຫວະ ແລະ ທຳນອງຂອງບົດເພງ ໄດ້ຊ່ວຍຢ່ອນອາລົມໃນການອອກແຮງງານ ທີ່ໜັກໜ່ວງ, ຟື້ນຟູກຳລັງໃນຍາມພັກຜ່ອນ. ສິລະປະກຳຂອງປະຊາຊົນ ແມ່ນການສ່ອງແສງເຖິງຊີວິດການເປັນຢູ່ ແລະ ການຕໍ່ສູ້ຂອງພວກເຂົາເຈົ້າ.

ປະຊາຊົນ ແມ່ນຜູ້ສ້າງວັດທະນະທຳດ້ານຈິດໃຈ ຍ້ອນວ່າຊີວິດຂອງປະຊາຊົນໄດ້ສະໜອງເນື້ອໃນໃຫ້ແກ່ການປະດິດສ້າງສິລະປະກຳ ຍ້ອນວ່າກະໂຕປະຊາຊົນນັ້ນເອງເປັນຜູ້ປະດິດສ້າງ ສ່ວນປະກອບສຳຄັນທີ່ສຸດຂອງວັດທະນະທຳຄືພາສາຄວາມເວົ້າ, ກໍ່ສ້າງກະວີນິພົນ, ດົນຕີ, ບົດຟ້ອນ ແລະ ສຸດທ້າຍ ປະຊາຊົນແມ່ນຕົ້ນຕໍໃນການຕັດສິນບັນດາຜົນງານດ້ານສິລະປະກຳ. ບັນດາ ນັກເຄື່ອນໄຫວດ້ານວັດທະນະທຳທີ່ຍິ່ງໃຫຍ່ເອງ ເປັນຜູ້ຊີ້ແຈງເຖິງບົດບາດ ຂອງປະຊາຊົນວ່າເປັນຄືຜູ້ປະດິດສ້າງສິ່ງທີ່ມີຄຸນຄ່າດ້ານຈິດໃຈ. ເຊັ່ນນັກແຕ່ງເພງລັດເຊຍ ເຊຣອຟ ໄດ້ຂຽນວ່າ ບົດ ເພງພື້ນເມືອງ ໃນຖານະເປັນປະເພດ-ໜຶ່ງຂອງດົນຕີ ບໍ່ແມ່ນການປະດິດແຕ່ງຂອງບາງບຸກຄົນທີ່ມີພອນສະຫວັນ ໃນການປະດິດສ້າງທາງດົນຕີ ແຕ່ຫາກແມ່ນຜົນງານຂອງທົ່ວປວງຊົນ. ຜູ້ສ້າງຕັ້ງວັນນະຄະດີໂຊວຽດ ມ. ກໍອກກີ ໄດ້ໃຫ້ຂໍ້ສັງເກດວ່າ ປະຊາຊົນບໍ່ພຽງແຕ່ແມ່ນກຳລັງທີ່ສ້າງທຸກໆຊັບສິນວັດຖຸເທົ່ານັ້ນ, ປະຊາຊົນຍັງແມ່ນຕົ້ນກຳເນີດພຽງ ຜູ້ດຽວ ແລະ ບໍ່ມີວັນເຫືອດແຫ້ງຈັກເທື່ອ ສຳລັບສິ່ງທີ່ມີຄຸນຄ່າທາງດ້ານຈິດໃຈ, ແມ່ນນັກປັດຊະຍາ ແລະ ນັກກະວີຜູ້ທີໜຶ່ງ ບໍ່ວ່າໃນດ້ານກາລະເວລາ, ໃນດ້ານຄວາມສວຍງາມ ແລະ ໃນດ້ານຄວາມປີຊາສາມາດໃນການປະດິດສ້າງ, ຜູ້ທີ່ໄດ້ສ້າງຕັ້ງບົດກະວີ, ລະຄອນໂສກທີ່ຍິ່ງໃຫຍ່ຂອງໂລກທຸກໆບົດ ແລະ ບົດທີ່ຍິ່ງໃຫຍ່ທີ່ສຸດໃນຈຳນວນນີ້ແມ່ນປະຫວັດສາດວັດທະນະທຳຂອງທົ່ວໂລກ.

ດັ່ງນີ້ ພວກເຮົາໄດ້ໄຈ້ແຍກບົດບາດຂອງມະຫາຊົນ ໃນການຜະລິດວັດຖຸ, ໃນຊີວິດສັງຄົມ-ການເມືອງ, ແລະ ໃນການຂະຫຍາຍວັດທະນະທຳດ້ານ ຈິດໃຈ. ໃນປະຫວັດສາດຂອງສັງຄົມບົດບາດດັ່ງກ່າວໄດ້ຮັບການເພີ່ມທະວີຂຶ້ນ ຢູ່ເປັນປະຈຳ. ບັນດາຜູ້ສ້າງຕັ້ງລັດທິມາກ-ເລນິນ ໄດ້ຄົ້ນພົບແລະວາງພື້ນຖານໃຫ້ແກ່ກົດເກນເພີ່ມທະວີບົດບາດ ຂອງມະຫາຊົນໃນຂະບວນວິວັດແຫ່ງປະຫວັດ

ສາດ.

ຕາມທີ່ຂະໜາດຂອງການຜະລິດ ແລະ ການພົວພັນແຫ່ງການຜະລິດ ໄດ້ເຕີບໃຫຍ່ຂະຫຍາຍຕົວແລ້ວ, ບົດບາດຂອງມະຫາຊົນໃນດ້ານການເຄື່ອນໄຫວຢ່າງມີສະຕິກໍໄດ້ຮັບການເພີ່ມທະວີ, ມີການເຊີດຊູຄວາມຮັບຜິດຊອບຂອງພວກເຂົາເຈົ້າຕໍ່ທຸກສິ່ງທຸກຢ່າງທີ່ເກີດຂຶ້ນໃນໂລກ. ກ.ມາກ ໄດ້ຂຽນວ່າ " ພ້ອມກັນກັບລັກສະນະໜັກແໜ້ນຂອງການກະທຳປະຫວັດສາດແລ້ວ, ປະລິ ມານຂອງມະຫາຊົນທີ່ເປັນເຈົ້າຂອງເຫດການດັ່ງກ່າວນີ້ ກໍຈະເພີ່ມທະວີຂຶ້ນເປັນລຳດັບເຊັ່ນດຽວກັນ". ໑) ໂດຍໄຈ້ແຍກເນື້ອໃນຕົ້ນຕໍຂອງກົດເກນນີ້ແລ້ວ, ວ.ອີ ເລນິນ ໄດ້ຊີ້ແຈງວ່າ: "ຕາມທີ່ການສ້າງປະຫວັດສາດຂອງຄົນໄດ້ຮັບການຂະຫຍາຍຕົວໃນທາງກວ້າງ ແລະ ທາງເລິກແລ້ວ ຈຳນວນພົນລະເມືອງ ທີ່ເປັນຜູ້ເຄື່ອນໄຫວສ້າງປະຫວັດສາດດ້ວຍຄວາມຕື່ນຕົວນັ້ນ ກໍຕ້ອງເພີ່ມທະວີຂຶ້ນເຊັ່ນດຽວກັນ" ໒).

ບົດບາດຂອງມະຫາຊົນ ໃນຂະບວນວິວັດຂອງປະຫວັດສາດຈະເພີ່ມທະວີ-ຂຶ້ນຕາມທີ່ຮູບຖານຈັດຕັ້ງສັງຄົມ-ເສດຖະກິດໜຶ່ງ ຂ້າມຜ່ານສູ່ຮູບຖານຈັດ ຕັ້ງອີກອັນໜຶ່ງ. ໃນໄລຍະບັນດາການປະຕິວັດສັງຄົມ ບົດບາດນີ້ໄດ້ປະກົດ ຕົວອອກຢ່າງໃສແຈ້ງເປັນພິເສດ. ສ່ວນພວກທີ່ປົກປ້ອງຊົນຊັ້ນກົດຂີ່ຂູດຮີດ ພາກັນຢັ້ງຢືນວ່າ ການປະຕິວັດປະຊາຊົນແມ່ນ "ການກໍ່ຄວາມວຸ້ນວາຍ", "ແມ່ນການປົກຄອງດ້ວຍກຳລັງຮຸນແຮງ ແລະ ແມ່ນໄພພິບັດ" "ການພັງທະ ລາຍຢ່າງຮາບກຽງ". ໃນການຕອບໂຕ້ຕໍ່ສັດຕູຂອງການປະຕິວັດ ເລນິນ ໄດ້ຂຽນວ່າ: "ບໍ່ມີຍາມໃດທີ່ມະຫາຊົນຈະບໍ່ສາມາດເປັນຜູ້ປະດິດສ້າງຜູ້ຫ້າວຫັນ ລະບຽບການສັງຄົມໃໝ່ ຄືກັນກັບໃນໄລຍະດຳເນີນການປະຕິວັດ. ໃນໄລຍະນີ້ປະຊາຊົນມີຄວາມສາມາດຈະສຳເລັດສິ່ງມະຫັດສະຈັນໄດ້" ໓).

ໄລຍະຂ້າມຜ່ານແຕ່ລະບອບສັງຄົມໜຶ່ງ ກ້າວຂຶ້ນສູ່ລະບອບສັງຄົມອີກ ອັນໜຶ່ງນັ້ນ ບໍ່ສາມາດຈະດຳເນີນໄປໂດຍປາສະຈາກການຕໍ່ສູ້ປະຕິວັດຂອງມະຫາ

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ.ເຫລັ້ມ ໒, ໜ້າ ໙໐.

໒) ວ.ອີ.ເລນິນ.ບົດນິພົນຄົບຊຸດ.ເຫລັ້ມ ໒, ໜ້າ ໕໓໙-໕໔໐.

໓) ວ.ອີ.ເລນິນ. ນິພົນຄົບຊຸດ, ເຫລັ້ມ ໑໑, ໜ້າ ໑໐໓.

ຊົນຕ້ານລະບອບເກົ່າທີ່ຫລ້າຫລັງໄປແລ້ວນັ້ນໄດ້ຈັກເທື່ອ. ມີແຕ່ການຕໍ່ສູ້ ຂອງມະຫາຊົນເທົ່ານັ້ນ ທີ່ແກ້ໄຂຄວາມຂັດແຍ່ງພື້ນຖານໃນຕົວຈິງໃນການຂະຫຍາຍຕົວສັງຄົມ ທຸກໆປະການ ແລະ ປະຕິບັດການຂ້າມຜ່ານແບບປະຕິວັດແຕ່ ລະບອບສັງຄົມເກົ່າກ້າວຂຶ້ນສູ່ລະບອບໃຫມ່ທີ່ກ້າວຫນ້າກວ່າເກົ່າ. ໃນໄລຍະການຕໍ່ສູ້ປະຕິວັດຂອງມະຫາຊົນໃນບໍ່ເທົ່າໃດມື້, ອາທິດ, ເດືອນ ໄດ້ແກ້ໄຂຄວາມຂັດແຍ່ງທີ່ໄດ້ຂະຫຍາຍຕົວ ແລະ ສະສົມມາໃນຊົ່ວໄລຍະຫລາຍສະຕະວັດແລ້ວ. ການພິສູດທີ່ເດັ່ນຊັດທີ່ສຸດສຳລັບຂໍ້ຄວາມດັ່ງກ່າວນີ້ ແມ່ນການປະຕິວັດຢູ່ລັດເຊຍ ແລະ ການປະຕິວັດສັງຄົມນິຍົມໃນປະເທດອື່ນໆ.

ກິດຈະການເພີ່ມທະວີບົດບາດຂອງ ມະຫາຊົນໃນປະຫວັດສາດໄດ້ມີ ເນື້ອໃນໃຫມ່ດ້ານຄຸນນະພາບໃນເງື່ອນໄຂສັງຄົມນິຍົມ. ການຂ້າມຜ່ານແຕ່ທຶນນິຍົມ - ກ້າວຂຶ້ນສູ່ສັງຄົມນິຍົມ ແມ່ນການຫັນປ່ຽນດ້ານສັງຄົມທີ່ເລິກເຊິ່ງທີ່ສຸດ ທີ່ໄດ້ດັດສ້າງທຸກໆດ້ານຂອງຊີວິດສັງຄົມ. ການດຶງດູດເອົາມະຫາຊົນເປັນລ້ານໆ ຄົນເຂົ້າໃນການປະດິດສ້າງ ອັນຫ້າວຫັນ ແລະ ມີຄວາມຫມາຍປະຫວັດສາດແມ່ນຄວາມຈຳເປັນແບບພາວະວິໄສສຳລັບລະບອບສັງຄົມນິຍົມ. ວ.ອີ.ເລນິນ ໄດ້ເວົ້າວ່າ: "ການກະທຳປະ ຫວັດສາດຍິ່ງ ມີຂະຫນາດໃຫຍ່ເທົ່າໃດ, ຍິ່ງກວ້າງເທົ່າໃດ, ຈຳນວນຄົນທີ່ເຂົ້າຮ່ວມໃນການກະທຳດັ່ງກ່າວຍິ່ງຫລາຍເທົ່ານັ້ນ, ແລະ ກົງກັນຂ້າມ ການດັດສ້າງທີ່ພວກເຮົາຢາກດຳເນີນນັ້ນຍິ່ງ ເລິກເຊິ່ງເທົ່າໃດ ຍິ່ງຕ້ອງປຸກລຸກຄວາມສົນໃຈ ແລະ ຄວາມຕື່ນຕົວ, ຍິ່ງຕ້ອງ ຈູງລ່ອງໃຫ້ມະຫາຊົນເປັນສິບໆລ້ານຄົນໃຫ້ເຂົ້າໃຈຄວາມຈຳເປັນຂອງການ ດັດສ້າງດັ່ງກ່າວເທົ່ານັ້ນ" ໑).

ການເພີ່ມທະວີບົດບາດຂອງມະຫາຊົນໃນເງື່ອນໄຂສັງຄົມນິຍົມ ດຳເນີນ-ໄປໃນສາມທິດທາງ: ກ) ກໍ່ສ້າງພື້ນຖານວັດຖຸເຕັກນິກຂອງກອມມູນິດນິຍົມ ; ຂ) ເສີມຂະຫຍາຍແລະປັບປຸງການພົວພັນສັງຄົມ, ຄ) ສືບຕໍ່ເສີມຂະ ຫຍາຍວັດທະນະທຳດ້ານຈິດໃຈຂອງສັງຄົມ, ແບບແຜນດຳລົງຊີວິດແບບສັງຄົມນິຍົມ, ກໍ່ສ້າງຄົນໃຫມ່. ທິດທາງດັ່ງກ່າວນີ້ສອດຄ່ອງກັບສາມຂົງເຂດພື້ນຖານຂອງ ຊີວິດສັງຄົມ, ຄື: ຂົງເຂດເສດຖະກິດ, ສັງຄົມ-ການເມືອງ ແລະ ຈິດໃຈ.

---

໑) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໔໔, ຫນ້າ ໑໔໐.

ການສືບຕໍ່ເພີ່ມທະວີບົດບາດຂອງມະຫາຊົນ ໃນການຕໍ່ສູ້ເພື່ອສັນຕິພາບ , ປະຊາທິປະໄຕ ແລະ ສັງຄົມນິຍົມໃນບັນດາປະເທດທຶນນິຍົມ ທີ່ຂະຫຍາຍຕົວ, ການຕໍ່ສູ້ຂອງມະຫາຊົນຕ້ານນະໂຍບາຍຊຸນເສີກຂອງຈັກກະພັດອາເມລິກາ, ຕ້ານການຊ່ວງເສັງປະກອບອາວຸດ, ເພື່ອສະກັດກັ້ນອາວຸດປະລະມານູ ແລະອາວຸດລ້າງຜານອື່ນໆ ເພື່ອສັນຕິພາບລະຫວ່າງຊາດນັ້ນ ມີລັກສະນະດຸເດືອດຂົ້ນເປັນພິເສດ.

ກົດເກນເພີ່ມທະວີບົດບາດຂອງມະຫາຊົນ ໄດ້ສະແດງອອກນັບມື້ນັບ ໃສແຈ້ງ ແລະ ກວ້າງຂວາງໃນຂະບວນການ ປົດປ່ອຍຊາດ. ລະບົບລ່າເມືອງ-ຂຶ້ນຂອງຈັກກະພັດນິຍົມຖືກພັງທະລາຍລົງ ແລະ ນຳໄປເຖິງການສ້າງຕັ້ງ ບັນດາລັດເອກະລາດໃຫມ່ຫລາຍກວ່າ ໑໐໐ ລັດ ເຊິ່ງໃນນັ້ນມີພົນລະເມືອງກວ່າສອງພັນລ້ານຄົນ. ຈຸດພິເສດຂອງຂະບວນການປົດປ່ອຍຊາດໃນໄລຍະປະຈຸບັນນີ້ແມ່ນການເພີ່ມທະວີການຕໍ່ສູ້ຂອງປະຊາຊົນໃນບັນດາປະເທດເຫລົ່ານີ້ ເພື່ອຄວາມເປັນເອກະລາດດ້ານເສດຖະກິດ ແລະ ຄວາມກ້າວຫນ້າທາງສັງຄົມ , ຕ້ານລັດທິລ່າເມືອງຂຶ້ນແບບໃຫມ່ ແລະ ຄວາມຫລ້າຫລັງດ້ານເສດຖະກິດ. ມີການເພີ່ມທະວີທິດທາງການຕໍ່ສູ້ຕ້ານທຶນນິຍົມ, ເຊີດຊູບົດບາດຂອງຊົນຊັ້ນ ກຳມະກອນ, ຊາວນາ ແລະ ບັນດາກຳລັງທີ່ກ້າວຫນ້າອື່ນໆ.

ມີບາງປະເທດໃນທະວີບອາຊີ, ອາຟຣິກກາ, ອາເມລິກາກາງໄດ້ເລືອກເອົາເສັ້ນທາງຂະຫຍາຍຕົວແບບສັງຄົມນິຍົມ. ໃນບົດລາຍງານຂອງສູນ ກາງພັກຕໍ່ກອງປະຊຸມໃຫຍ່ຄັ້ງທີ ໒໕ ຂອງ ພ.ກ.ສ.ຊ. ມີບາງຕອນບົ່ງວ່າ:"ແນ່ນອນການຂະຫຍາຍຕົວຂອງບັນດາປະເທດດັ່ງກ່າວຕາມເສັ້ນທາງກ້າວຫນ້າ ບໍ່ໄດ້ດຳເນີນໄປແບບດຽວກັນ, ແລະ ດຳເນີນໄປໃນເງື່ອນໄຂທີ່ສັບສົນ. ແຕ່ທິດທາງພື້ນຖານຄ້າຍຄືກັນ. ອັນນີ້ແມ່ນການລົບລ້າງເປັນກ້າວໆການ ຜູກຂາດຂອງ ພວກຈັກກະພັດນິຍົມ, ຂອງພວກນາຍທຶນ ແລະ ສັກດີນາໃຫຍ່ໃນ ທ້ອງຖິ່ນ, ຈຳກັດການເຄື່ອນໄຫວຂອງທຶນຕ່າງປະເທດ. ອັນນີ້ແມ່ນການຮັບປະກັນໃຫ້ລັດຂອງປະຊາຊົນມີບົດບາດນຳພາໃນເສດຖະກິດ ແລະ ກ້າວຂຶ້ນສູ່ການພັດທະນາກຳລັງແຫ່ງການຜະລິດແບບມີແຜນການ, ຊຸກຍູ້ຂະບວນສ້າງສະຫະກອນຢູ່ເຂດຊົນນະບົດ. ອັນນີ້ແມ່ນການເຊີດຊູບົດບາດຂອງມະຫາຊົນຊາວຜູ້ອອກ - ແຮງງານໃນຊີວິດຂອງສັງຄົມ, ປັບປຸງກົງຈັກຂອງລັດເພື່ອລະກ້າວດ້ວຍຖຸນ

ແຖວພະນັກງານຂອງຊາດ ທີ່ຈົງຮັກພັກດີຕໍ່ປະຊາຊົນ. ອັນນີ້ແມ່ນລັກສະນະຕ້ານຈັກກະພັດນິຍົມ ໃນນະໂຍບາຍຕາງປະເທດຂອງບັນດາປະເທດດັ່ງກາວ. ພັກປະຕິວັດທີ່ຕາງໜ້າໃຫ້ແກ່ຜົນປະໂຫຍດຂອງມະຫາຊົນ ຊາວຜູ້ອອກແຮງງານ-ຈຳນວນຫລວງຫລາຍໃນປະເທດດັ່ງກ່າວນັ້ນ ກໍບໍ່ໝັ້ນບໍ່ເຂັ້ມແຂງແຮງກ້າ"[1].

ກົດເກນເພີ່ມທະວີບົດບາດຂອງມະຫາຊົນ ໃນປະຫວັດສາດໄດ້ມີຜົນບັງຄັບໃຊ້ໂດຍອີງໃສ່ສາມກຳລັງແຮງຕົ້ນຕໍຂອງຂະບວນການປະຕິວັດ ຂອງຍຸກ ສະໄໝນີ້, ຄື ຊາວຜູ້ອອກແຮງງານໃນບັນດາປະເທດສັງຄົມນິຍົມ, ຊົນຊັ້ນ ກຳມະກອນໃນບັນດາປະເທດທຶນນິຍົມ ແລະ ຂະບວນການປົດປ່ອຍຊາດ. ສຳລັບບັນດາພັກລັດທິມາກ-ເລນິນ ແລ້ວ ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບບົດ ບາດຂອງມະຫາຊົນໃນປະຫວັດສາດມີຄຸນປະໂຫຍດສຳລັບຊີ້ນຳການເຄື່ອນໄຫວວຽກງານຕົວຈິງ. ຂໍ້ວິນິດໄສຂອງລັດທິມາກ-ເລນິນ ກ່ຽວກັບປະຊາຊົນເປັນຄື ຜູ້ສ້າງປະຫວັດສາດນັ້ນ ຍັງມີຄວາມໝາຍໃຫຍ່ຫລວງສຳລັບກະໂຕຊາວ ຜູ້ອອກແຮງງານເອງ. ມັນປຸກລະດົມຄວາມຮັບຜິດຊອບຂອງພວກເຂົາເຈົ້າຕໍ່ໂຊກຊາຕາຂອງ ມວນມະນຸດ, ຊີ້ແຈງໃຫ້ເຫັນວ່າ ມີແຕ່ປະຊາຊົນເທົ່ານັ້ນຈິ່ງສາມາດສ້າງເງື່ອນໄຂຊີວິດການເປັນຢູ່ທີ່ດີກວ່າເກົ່າ, ເຮັດໃຫ້ມີສັນຕິພາບ,ແຮງງານອິດສະຫລະພາບ, ສິດສະເໝີພາບ, ຄວາມເປັນອ້າຍນ້ອງຮ່ວມກັນ ແລະ ຄວາມສຸກສຳລານຢູ່ໃນໂລກ.

## ຝ. ບົດບາດຂອງບຸກຄົນໃນປະຫວັດສາດ

ໂດຍຖືວ່າ ການເຄື່ອນໄຫວຂອງມະຫາຊົນແມ່ນກຳລັງທີ່ຕັດສິນຊີ້ຂາດ ໃນປະຫວັດສາດແລ້ວ ລັດທິມາກ-ເລນິນ ບໍ່ປະຕິເສດບົດບາດຂອງບຸກຄົນ ໃນປະຫວັດສາດ. ທິດສະດີມາກ-ເລນິນ ຕ້ານບັນຫາທີ່ວ່າ ບຸກຄົນມີບົດບາດຕັດສິນຊີ້ຂາດ ໃນຂະບວນວິວັດແຫ່ງປະຫວັດສາດ.

---

໑) ເອກະສານ ກອງປະຊຸມໃຫຍ່ ຄັ້ງທີ ໒໔ ພ.ກ.ສ.ຊ., ມົດສະກູ , ໑໙໗໑, ໜາ ໑໔.

ກ່ອນການປະກົດຕົວຂອງລັດທິມາກ ບັນຫາກ່ຽວກັບບົດບາດຂອງບຸກຄົນໃນປະຫວັດສາດບໍ່ໄດ້ຮັບການແກ້ໄຂແບບມີວິທະຍາສາດ. ບັນດານັກ ປັດຊະຍາ ແລະ ນັກປະຫວັດສາດກ່ອນສະໄໝ ມາກ ພາກັນຖືວ່າ ບັນດາບຸກຄົນຜູ້ ເລີດລ້ຳເຊັ່ນ ວິລະຊົນ, ລັດຖະບຸລຸດ, ແມ່ທັບ ແລະ ອື່ນໆເປັນຜູ້ສ້າງ ປະຫວັດສາດ. ມີແຕ່ລັດທິມາກເທົ່ານັ້ນ ທີ່ໄດ້ອະທິບາຍບັນຫານີ້ຢ່າງມີວິທະຍາສາດແທ້ຈິງ. ຟ.ອັງແກນ ໄດ້ຂຽນວ່າ: "ເຫດການທີ່ວ່າ ບຸກຄົນຜູ້ຍິ່ງໃຫຍ່ດັ່ງກ່າວນີ້ ແລະຕ້ອງແມ່ນພວກນີ້ ປະກົດຕົວຂຶ້ນໃນໄລຍະທີ່ແນ່ນອນໃນປະເທດອັນແນ່ນອນນັ້ນ ແມ່ນການບັງເອີນ. ແຕ່ຖ້າຫາກປັດເຂຍພວກກ່ຽວອອກແລ້ວ, ແມ່ນ ວ່າຈະມີຄວາມຮຽກຮ້ອງຕ້ອງການໃຫ້ມີຜູ້ມາປ່ຽນແທນ, ແລະ ຜູ້ຈະມາປ່ຽນແທນນັ້ນຈະເກັ່ງກວ່າຫລືດ້ອຍກວ່າກໍ່ຕາມ, ແຕ່ຜ່ານໄລຍະໃດໜຶ່ງຕ້ອງມີຜູ້ມາປ່ຽນແທນ. ບັນຫາທີ່ວ່າ ຕ້ອງແມ່ນ ນາໂປເລອົງ, ຕ້ອງແມ່ນກະໂຕຊາວກອກເຊິຜູ້ນີ້ເປັນຜະເດັດການທະຫານ ທີ່ຈຳເປັນສຳລັບສາທາລະນະລັດຝະລັ່ງ ທີ່ຊຸດໂຊມຍ້ອນສົງຄາມ ດັ່ງນີ້ແມ່ນການບັງເອີນ. ແຕ່ຖ້າຫາກບໍ່ມີ ນາໂປເລອົງ - ແລ້ວ, ກໍ່ຈະມີຜູ້ອື່ນ ມາດຳເນີນບົດບາດຂອງເຂົາ. ອັນນີ້ ພິສູດໄດ້ ໂດຍທີ່ບໍ່ວ່າຍາມໃດ ໃນເມື່ອມີຄວາມຕ້ອງການຄົນຜູ້ນີ້ແລ້ວ, ເວລາໃດກໍ່ມີເຂົາຢູ່ ສະເໝີ: ຄີເຊຊາ, ໂອກູດ, ໂກຼມແວນ ແລະ ອື່ນໆ"[໑)].

ເພື່ອໄຈ້ແຍກບົດບາດຂອງບຸກຄົນຜູ້ນີ້ຄືຜູ້ນັ້ນໃນປະຫວັດສາດ ຕ້ອງຄົ້ນຄວ້າເບິ່ງວ່າ ບຸກຄົນຜູ້ນີ້ຕາງໜ້າໃຫ້ຜົນປະໂຫຍດຂອງຊົນຊັ້ນໃດ, ເງື່ອນໄຂ ສຳລັບການເຄື່ອນໄຫວຂອງຜູ້ກ່ຽວມີຄວາມສະດວກຫລາຍປານໃດ, ຜູ້ກ່ຽວໄດ້ສະແດງແນວຄິດ, ໂລກະທັດ, ໜ້າທີ່ຂອງຊົນຊັ້ນດັ່ງກ່າວອອກໃນຈຸດປະສົງ,ໂຄງການ ແລະ ທິດສະດີຂອງຕົນຢ່າງເຕັມສ່ວນ ແລະ ເລິກເຊິ່ງເຖິງຂັ້ນໃດ, ຜູ້ກ່ຽວມີຄວາມສາມາດປະສົມປະສານທິດສະດີ ແລະ ພຶດຕິກຳຕົວຈິງໄດ້ພຽງໃດ ແລະ ຜູ້ກ່ຽວມີບົດຮຽນ, ຄວາມສະຫລາດສ່ອງໃສ, ຄວາມສາມາດສ່ວນ ຕົວແນວໃດແດ່. ສຳລັບບຸກຄົນປະຫວັດສາດແລ້ວ ບັນດາລັກສະນະສະເພາະເຊັ່ນຄວາມບໍ່ຢ້ານກົວ, ຄວາມກ້າຫານ, ຄວາມສາມາດຄຳນຶງເຖິງມານະຈິດຂອງໝູ່ຄະນະ, ໄດ້ຮັບການເຊື່ອຖືຈາກຊົນຊັ້ນນັ້ນ ມີຄວາມໝາຍບໍ່ໜ້ອຍ.

---

໑) ກ.ມາກ ແລະ ຟ.ອັງແກນ. ບົດນິພົນ, ເຫລັ້ມ ໓໙, ໜ້າ໑໗໕-໑໗໖.

ການປະກົດຕົວຂອງບຸກຄົນທີ່ຍິ່ງໃຫຍ່ຜູ້ນີ້ ຫຼື ຜູ້ນັ້ນ ສະແດງເຖິງຄວາມຈຳເປັນດ້ານປະຫວັດສາດ. ເລນິນ ໄດ້ຊີ້ແຈງມາແລ້ວວ່າແນວຄິດກ່ຽວກັບຄວາມຈຳເປັນດ້ານປະຫວັດສາດ ບໍ່ໄດ້ທຳລາຍບົດບາດຂອງບຸກຄົນໃນປະຫວັດ ສາດຈັກດີ. ທ່ານໄດ້ຂຽນວ່າ: "ພູກຄົນຮູ້ນຳກັນວ່າ ມະຫາຊົນແບ່ງອອກເປັນ ບັນດາຊົນຊັ້ນ...ວ່າຕາມທຳມະດາ ແລະ ໃນກໍລະນີສ່ວນຫລວງຫລາຍແລ້ວ ຜູ້ນຳພາຊົນຊັ້ນ...ແມ່ນບັນດາພັກການເມືອງ; ວ່າບັນດາພັກການເມືອງ...ຢູ່ພາຍໃຕ້ການຊີ້ນຳຂອງບັນດາຄະນະທີ່ມີຄວາມໝັ້ນຄົງຢ່າງຫລາຍກວ່າ ຫລືໜ້ອຍກວ່າ ທີ່ປະກອບດ້ວຍບັນດາບຸກຄົນທີ່ມີອິດທິພົນ, ມີຊຸນວຸດທິ ແລະ ມີບົດຮຽນຫລາຍກວ່າໝູ່, ຖືກເລືອກຕັ້ງໃຫ້ຂຶ້ນຮັບໜ້າທີ່ທາງການທີ່ສຳຄັນກວ່າໝູ່ ແລະ ຖືກຮຽກເປັນຜູ້ນຳ" [1].

ກ.ມາກ, ຟ.ອັງແກນ ແລະ ວ.ອີ.ເລນິນ ແມ່ນຜູ້ນຳທີ່ຍິ່ງໃຫຍ່ ແລະປີຊາສາມາດຂອງຊົນຊັ້ນກຳມະກອນ.

ກ.ມາກ ແລະ ຟ.ອັງແກນ ໄດ້ປະກອບໂລກະທັດກອມມູນິດວິທະຍາສາດຢ່າງແທ້ຈິງເປັນອາວຸດ ໃຫ້ແກ່ຊົນຊັ້ນກຳມະກອນ, ໄດ້ວາງພື້ນຖານ ບົດບາດອັນເປັນປະຫວັດສາດໃນທົ່ວໂລກຂອງຊົນຊັ້ນກຳມາຊີບ. ທ່ານທັງສອງ ໄດ້ດຳເນີນການຫັນປ່ຽນແບບປະຕິວັດໃນປັດຊະຍາ, ໃນເສດຖະສາດ-ການເມືອງ, ໃນທິດສະດີກ່ຽວກັບສັງຄົມນິຍົມ. ຜົນງານຂອງພວກທ່ານໃນການຄົ້ນຄວ້າ ທິດສະດີກ່ຽວກັບການປະຕິວັດນັ້ນ ມີຄວາມໝາຍຍິ່ງໃຫຍ່.

ວ.ອີ.ເລນິນ ໄດ້ເສີມຂະຫຍາຍ ແລະ ເພີ່ມທະວີລັດທິມາກ ຢ່າງມີຫົວຄິດປະດິດສ້າງ, ໄດ້ປະສົມປະສານລັດທິມາກເຂົ້າກັບພຶດຕິກຳຕົວຈິງຂອງ ຂະບວນການປະຕິວັດ. ບຸກຄະລິກລັກສະນະຂອງ ວ.ອີ.ເລນິນ ສາມາດເປັນ ຊຸດົມຄະຕິຂອງນັກປະຕິວັດທີ່ແທ້ຈິງ. ທ່ານໄດ້ຍົກລັດທິມາກຂຶ້ນສູ່ລະດັບໃໝ່ທີ່ສູງກວ່າເກົ່າ. ການປະກອບສ່ວນຂອງ ເລນິນ ເຂົ້າໃນການເສີມຂະຫຍາຍ ທິດສະດີມາກ ແລະ ອັງແກນ ນັ້ນຍິ່ງໃຫຍ່ຈົນເຖິງຂັ້ນວ່າມູນມໍລະດົກດ້ານທິດສະດີຂອງທ່ານດີ ລັດທິ ເລນິນ ນັ້ນໄດ້ຮັບການຂະໜານນາມຢ່າງຖືກຕ້ອງວ່າ ລັດທິມາກ ໃນຍຸກສະໄໝປະຈຸບັນ.

---

1) ວ.ອີ.ເລນິນ.ບົດນິພົນຄົບຊຸດ, ເຫລັ້ມ ໔໑, ໜ້າ ໒໔.

ເລນິນ ໄດ້ສ້າງຕັ້ງ ແລະ ອົບຮົມພັກຂອງຊາວກອມມູນິດ,ພັກຊະນິດໃຫມ່, ໄດ້ວາງໂຄງການ, ຍຸດທະສາດ ແລະ ຍຸດໂທບາຍຂອງພັກຢ່າງຮອບດ້ານ , ໄດ້ເສີມຂະຫຍາຍບັນດາຫລັກການຂອງມາກ ກ່ຽວກັບການນຳພາເປັນຫມູ່ ຄະນະ ແລະ ໄດ້ປະຕິບັດຫລັກການດັ່ງກ່າວນີ້ໃນພາກຕົວຈິງ.

ເລນິນ ແມ່ນຜູ້ສ້າງຕັ້ງລັດສັງຄົມນິຍົມລັດທຳອິດໃນໂລກ, ແມ່ນຜູ້ນຳ ມະຫາ ປະຕິວັດສັງຄົມນິຍົມເດືອນຕຸລາ, ຜູ້ນຳ ແລະ ອາຈານຂອງຊົນຊັ້ນກຳມາຊີບໃນໂລກ. ທ່ານໄດ້ວາງໂຄງການທີ່ມີວິທະຍາສາດໃນການກໍ່ສ້າງສັງຄົມ ນິຍົມ ແລະ ກອມມູນິດນິຍົມຢູ່ ສ.ສ.ສ.ຊ.

ເລນິນ ໄດ້ພະຍາກອນການພັງທະລາຍຢ່າງຫລີກເວັ້ນບໍ່ໄດ້ຂອງລະບົບລ່າເມືອງຂຶ້ນຈັກກະພັດນິຍົມ, ຄາດຄະເນບົດບາດທີ່ຍິ່ງໃຫຍ່ຂອງຂະບວນການປົດປ່ອຍຊາດຂອງປະຊາຊົນ ຊາວຕາເວັນອອກໃນປະຫວັດສາດຂອງມວນມະນຸດ.

ຕາມຄວາມສະເຫນີຂອງ ເລນິນ ອຳນາດການປົກຄອງໂຊວຽດທີ່ຫາ ກໍ່ເກີດໃຫມ່ ໄດ້ຮັບຜ່ານດຳລັດວ່າດ້ວຍສັນຕິພາບໃນປີ ໑໙໑໗. ຈົນເຖິງປະຈຸບັນນີ້ ຊາວກອມມູນິດຍັງຊື່ສັດສຸດຈະຫລິດຕໍ່ແນວຄິດ ເລນິນ ກ່ຽວກັບການ ຢູ່ຮ່ວມກັນໂດຍສັນຕິລະຫວ່າງບັນດາປະເທດທີ່ມີລະບອບສັງຄົມແຕກຕ່າງກັນ.

ເລນິນ ແມ່ນຜູ້ນຳທີ່ແທ້ຈິງຂອງມະຫາຊົນຈຳນວນຫລວງຫລາຍທີ່ສຸດ ແລະ ແມ່ນນັກປະຕິວັດທີ່ບໍ່ຮູ້ຈັກຢ້ານກົວ. ທ່ານຮັກປະຊາຊົນ ແລະ ປະຊາຊົນຕອບສະຫນອງທ່ານດ້ວຍຄວາມຮັກຢ່າງບໍ່ມີຂອບເຂດ. ໃນຂະນະດຽວກັນນັ້ນທ່ານເປັນຜູ້ບໍ່ປະນີປະນອມ ແລະ ບໍ່ມີຄວາມເມດຕາຕໍ່ສັດຕູຂອງຊົນຊັ້ນກຳມະກອນ ແລະ ສັດຕູຂອງສັງຄົມນິຍົມ.

ເລນິນ ແມ່ນນັກສາກົນນິຍົມຜູ້ຍິ່ງໃຫຍ່, ແມ່ນນັກຕໍ່ສູ້ເພື່ອມິດຕະພາບ,ສິດສະເຫມີພາບ ແລະ ຄວາມເປັນອ້າຍນ້ອງກັນລະຫວ່າງທຸກໆຊົນຊາດແລະເຊື້ອຊາດ. ທ່ານຕ້ານລັດທິໂຊແວງ ແລະ ລັດທິຊາດນິຍົມນາຍທຶນຢ່າງເດັດຂາດ. ທ່ານຕໍ່ສູ້ເພື່ອຄວາມເປັນເອກະພາບສາກົນລະຫວ່າງຊາວກຳມະກອນໃນທຸກໆ ປະເທດພາຍໃຕ້ຄັນທຸງລັດທິມາກ, ລັດທິກອມມູນິດວິທະຍາສາດ.

ເລນິນ ເຊື່ອຫມັ້ນຕໍ່ກຳລັງປະດິດສ້າງທີ່ບໍ່ມີຂອບເຂດຂອງປະຊາຊົນ ແລະ ເຫັນປະຊາຊົນເປັນກຳລັງຊຸກດັນຕົ້ນຕໍຂອງປະຫວັດສາດ.

ລັດທິມາກ ໄດ້ປະກົດຕົວ ແລະ ເຕີບໃຫຍ່ເຂັ້ມແຂງທ່າມກາງການ ຕໍ່ສູ້

ຕ້ານຄວາມເຂົ້າໃຈກ່ຽວກັບປະຫວັດສາດ ແບບຈິດຕະນິຍົມ ທີ່ປະຕິເສດ ບົດບາດຕັດສິນຊີ້ຂາດຂອງມະຫາຊົນ ແລະ ທີ່ຖືສຳຄັນບົດບາດຂອງບຸກຄົນ. ບັນດາບຸກຄົນຜູ້ເລີດລ້ຳມີບົດບາດສຳຄັນໃນເຫດການປະຫວັດສາດ ຄືເປັນຜູ້ຈັດຕັ້ງນຳພາ ແລະ ປຸກລະດົມການຕໍ່ສູ້ຂອງມະຫາຊົນ ແລະ ບັນດາຊົນຊັ້ນ, ແຕ່ບົດບາດຕັດສິນຊີ້ຂາດໃນປະຫວັດສາດນັ້ນ ແມ່ນຂອງມະຫາຊົນ. ຊາວກອມມູ ນິດຈົດຈຳຄຳຊີ້ນຳຂອງ ເລນິນ ທີ່ວ່າ ສັງຄົມນິຍົມ ບໍ່ແມ່ນສ້າງຂຶ້ນຕາມການຊີ້ນຳຈາກເບື້ອງເທິງ ວ່າ "ສັງຄົມນິຍົມທີ່ມີຊີວິດຊີວາ ແລະ ມີຫົວຄິດປະດິດ ສ້າງນັ້ນ ແມ່ນຜົນງານຂອງມະຫາຊົນເອງ"[1]. ແຕ່ບໍ່ມີຊົນຊັ້ນທີ່ກ້າວໜ້າ ຊົນຊັ້ນໃດໄດ້ສຳເລັດ ແລະ ກໍ່ບໍ່ສາມາດຈະສຳເລັດການປົດປ່ອຍຕົນເອງໄດ້ຖ້າຫາກຊົນຊັ້ນດັ່ງກ່າວບໍ່ຍົກເອົາຜູ້ນຳທີ່ສົມກຽດ ແລະ ມີອົດທົນອອກມາຈາກຖັນແຖວຂອງຕົນເອງ ເຊິ່ງເປັນຕົວແທນໃຫ້ແກ່ຜົນປະໂຫຍດ ແລະ ໜ້າທີ່ຂອງຊົນຊັ້ນຕົນ. "ໃນປະຫວັດສາດບໍ່ເຄີຍມີຊົນຊັ້ນໃດກ້າວຂຶ້ນສູ່ການປົກຄອງໄດ້, ຖ້າຫາກຊົນຊັ້ນດັ່ງກ່າວບໍ່ຍົກເອົາຜູ້ນຳການເມືອງຂອງຕົນ, ຜູ້ຕາງໜ້າທີ່ກ້າວ ໜ້າຂອງຕົນ ທີ່ສາມາດຈັດຕັ້ງ ແລະ ນຳພາຂະບວນການ"[2].

ການຕໍ່ສູ້ຂອງກຸ່ມຄົນໃຫຍ່ໃນສັງຄົມ, ບັນດາຊົນຊັ້ນ ແລະ ມະຫາຊົນເປັນສິ່ງຕັດສິນບາດກ້າວຂອງປະຫວັດສາດ. ເພິ່ນສາມາດຈະເຂົ້າໃຈບົດບາດຂອງບັນດາບຸກຄົນທີ່ຍິ່ງໃຫຍ່ ໃນຂະບວນວິວັດແຫ່ງ ປະຫວັດສາດໄດ້ ຖ້າຫາກ ໄຈ້ແຍກການເຄື່ອນໄຫວຂອງບຸກຄົນດັ່ງກ່າວ ໃນສາຍພົວພັນກັບການຕໍ່ສູ້ ຂອງຊົນຊັ້ນ, ກັບການເຄື່ອນໄຫວ ແລະ ການຕໍ່ສູ້ຂອງກຸ່ມຄົນທີ່ໃຫຍ່ຫລວງໃນສັງຄົມ. ທັດສະນະລັດທິມາກ-ເລນິນ ກ່ຽວກັບບົດບາດຂອງມະຫາຊົນ ແລະ ຂອງ ບຸກຄົນໃນປະຫວັດສາດເປັນຄືແນວນັ້ນເອງ.

ທັດສະດີຈິດຕະນິຍົມ ຂອງພວກນາຍທຶນໃນສະໄໝປະຈຸບັນ ກ່ຽວກັບ "ຜູ້ຍອດຢ້ຽມ" ແລະ "ສັງຄົມຂອງມະຫາຊົນ" ນັ້ນ ຝືນກັບທັດສະນະລັດທິ ມາກເລນິນ ດັ່ງກ່າວ. ທາດແທ້ຂອງນິທານກ່ຽວກັບຜູ້ຍອດຢ້ຽມທີ່ບັນດານັກແນວຄິດນາຍທຶນ ໄດ້ ປັ້ນແຕ່ງຂຶ້ນມານັ້ນຢູ່ບ່ອນວ່າ ບໍ່ແມ່ນມະຫາຊົນ ບໍ່ແມ່ນຊາວ ຜູ້

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ, ເຫລັ້ມ ໓໔, ໜ້າ ໔໗.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໔, ໜ້າ ໓໗໔.

ອອກແຮງງານເປັນຜູ້ສ້າງປະຫວັດສາດ, ຫາກແມ່ນນັກທຸລະກິດໃຫຍ່ແຫ່ງ ທຶນຜູກຂາດ, ກຸ່ມຂ້າລັດຖະການຊັ້ນສູງ, ແລະ ປັນຍາຊົນ. ທິດສະດີກ່ຽວກັບ "ສັງຄົມຂອງມະຫາຊົນ" ໄດ້ແຍກສັງຄົມນາຍທຶນເປັນຄືປະເພດການພົວພັນ ລະຫວ່າງຄົນ ແລະ ບັນດາກຸ່ມຄົນໃນສັງຄົມ ເຊິ່ງໃນນັ້ນຄືວ່າໄດ້ບັນລຸ ລະດັບຄວາມປອງດອງລະຫວ່າງຊັ້ນຄົນຕ່າງໆ ໃນສັງຄົມຢ່າງສູງ, ສ່ວນມະຫາ ຊົນຮັບເອົາຊັບສົມບັດ ແລະ ແນວຄິດຂອງຜູ້ຍອດຢ້ຽມ. ທິດສະດີນີ້ອະທິບາຍຈຸດ-ອ່ອນພື້ນຖານຂອງລະບົບນາຍທຶນວ່າຍ້ອນປະຊາທິປະໄຕເຕີບໃຫຍ່ຂະຫຍາຍຕົວ ແລະ "ມະຫາຊົນໄດ້ລ່ວງລ້ຳ" ເຂົ້າໃນການເມືອງ. ຈຸດປະສົງຕົ້ນຕໍຂອງບັນດາທິດສະດີດັ່ງກ່າວ ແມ່ນເພື່ອຊວນເຊື່ອຊາວຜູ້ອອກແຮງງານ ວ່າພວກເຂົາ-ເຈົ້າບໍ່ມີຄວາມສາມາດຈະດຳເນີນການເຄື່ອນໄຫວຢ່າງເອກະລາດໂດຍປາສະຈາກບົດບາດນຳພາຂອງບັນດາຊົນຊັ້ນປົກຄອງ, ເພື່ອປິດບັງຄວາມຂັດແຍ່ງ ຕົວຈິງລະຫວ່າງນາຍທຶນ ແລະ ຊາວຜູ້ອອກແຮງງານ.

ສັງຄົມນິຍົມທີ່ແທ້ຈິງ ໄດ້ສະແດງໃຫ້ເຫັນໃນພຶດຕິກຳຕົວຈິງວ່າ ໂດຍເລີ່ມຈາກສັງຄົມນິຍົມເທົ່ານັ້ນ ໄດ້ມີ "ການເຄື່ອນເໜັງກ້າວໄປທາງໜ້າໃນທຸກໆຂົງເຂດແຫ່ງຊີວິດຂອງສັງຄົມ ແລະ ຂອງສ່ວນຕົວ, ເຊິ່ງເປັນການ ເຄື່ອນເໜັງທີ່ວ່ອງໄວ, ແທ້ຈິງ, ມີລັກສະນະມະຫາຊົນແທ້, ດ້ວຍການເຂົ້າ ຮ່ວມຂອງພົນລະເມືອງສ່ວນຫລວງຫລາຍ, ແລະ ຈາກນັ້ນ, ລວມເອົາພົນລະເມືອງທັງປວງ" [໑].

---

໑) ວ.ອີ.ເລນິນ ບົດນິພົນຄົບຊຸດ, ເຫລັ້ມ ໓໓, ໜ້າ ໙໙-໑໐໐.

# ພາກທີ ເກົ້າ

## ການຕໍ່ສູ້ຕ້ານແນວຄິດ ແລະ
## ບັນຫາການຂະຫຍາຍຕົວຂອງສັງຄົມ

ການຂ້າມຜ່ານແຕ່ທຶນນິຍົມ ຂຶ້ນສູ່ສັງຄົມນິຍົມ ທີ່ປະກອບເປັນເນື້ອໃນ ພື້ນຖານຂອງຍຸກສະໄໝປະຈຸບັນນັ້ນ ມີລັກສະນະຕໍ່ສູ້ຢ່າງບໍ່ປະນີປະນອມລະຫວ່າງບັນດາແນວຄິດສັງຄົມນິຍົມ ແລະ ນາຍທຶນ. ການຕໍ່ສູ້ນີ້ແມ່ນກົດເກນສຳຄັນ ທີ່ສຸດແຫ່ງການຂະຫຍາຍຕົວຂອງສັງຄົມ ໃນຍຸກສະໄໝປະຈຸບັນ. ມັນ ດຳເນີນໄປໃນເງື່ອນໄຂທີ່ວິກິດການຮອບດ້ານຂອງທຶນນິຍົມ ພວມເພີ່ມທະວີແລະສັງຄົມນິຍົມພວມກາຍເປັນປັດໄຈທີ່ຕັດສິນຊີ້ຂາດໃນການຂະຫຍາຍຕົວຂອງສັງຄົມ.

ໂດຍຢ້ານກົວຕໍ່ລະບົບແນວຄິດສັງຄົມນິຍົມ ອັນມີຜົນກະທົບນັບມື້ນັບສູງ ຂຶ້ນນັ້ນ ບັນດາວົງການປະຕິການໃນທົ່ວໂລກ ໄດ້ຮ່ວມກັນອອກແຮງບຸກໂຈມຕີ ສັງຄົມນິຍົມ ແລະ ແນວຄິດສັງຄົມນິຍົມ. ການຕໍ່ສູ້ຕ້ານແນວຄິດນັບມື້ນັບມີ ລັກສະນະຮຸນແຮງຂຶ້ນ ສ່ວນການໂຄສະນາຂອງຈັກກະພັດນິຍົມກໍ່ນັບມື້ນັບມີເລ່ຫລ່ຽມຮ້ອຍອັນພັນແນວ. ມັນມີກົງຈັກໂຄສະນາທີ່ໃຫຍ່ໂຕ ມະໂຫລານ, ນຳໃຊ້ - ເຕັກນິກສື່ສານ ທີ່ທັນສະໄໝ, ດຳເນີນການໂຄສະນາຊວນເຊື່ອ ປະຊາຊົນ. ການຕໍ່ສູ້ຕ້ານກັບແນວຄິດນາຍທຶນ ແມ່ນໜຶ່ງໃນຈຳນວນໜ້າທີ່ສຳຄັນທີ່ສຸດຂອງບັນດາພັກກອມມູນິດ ແລະ ພັກກຳມະກອນ.

ເພື່ອນສຳພັນທະມິດຕ້ານແນວຄິດຂອງນາຍທຶນ ຈັກກະພັດນິຍົມໃນການຕໍ່ສູ້ຕ້ານກັບແນວຄິດສັງຄົມນິຍົມນັ້ນ ແມ່ນພວກລັດທິປະຕິຮູບ, ລັດທິແກ້ອຽງຂວາ- ແລະອຽງຊ້າຍ,ລັດທິແຜ່ຂະຫຍາຍຊາດຍິ່ງ ແລະ ສັດຕູຕົວອື່ນໆຂອງສັງຄົມ ນິຍົມ ແລະ ຂອງໂລກະທັດແບບມີວິທະຍາສາດຂອງສັງຄົມນິຍົມ. ສິ່ງທີ່ ເຕົ້າໂຮມພວກດັ່ງກ່າວນີ້ແມ່ນຄວາມເປັນສັດຕູກັບລະບອບສັງຄົມໃໝ່ ຄື ລັດທິຕ້ານກອມມູນິດ. ເນື້ອໃນພື້ນຖານຂອງລັດທິຕ້ານກອມມູນິດໃນຖານະເປັນແນວ ຄິດ

ຂອງນາຍທຶນ ຈັກກະພັດນິຍົມນັ້ນ ແມ່ນການໃສ່ຮ້າຍປ້າຍສີ ສັງຄົມນິຍົມ, ບິດເບືອນການເມືອງ ແລະ ຈຸດປະສົງຂອງບັນດາພັກກອມມູນິດ, ບິດເບືອນ ທິດສະດີລັດທິມາກ-ເລນິນ. ໜຶ່ງໃນຈຳນວນຈຸດພິເສດທີ່ສຳຄັນທີ່ສຸດຂອງ ລັດທິຕ້ານກອມມູນິດໃນສະໄໝປະຈຸບັນນີ້ ແມ່ນສາຍພົວພັນເຊິ່ງກັນ ແລະ ກັນ ລະຫວ່າງທິດສະດີຕ້ານກອມມູນິດຂອງນາຍທຶນ ກັບລັດທິປະຕິຮູບສັງຄົມ ແລະ ລັດທິແກ້. ໃນປະຈຸບັນນີ້ບໍ່ມີບັນຫາໃດ, ບໍ່ວ່າຈະມີລັກສະນະສຳຄັນຫລາຍກວ່າຫລືໜ້ອຍກວ່າບັນຫາການຕໍ່ສູ້ດ້ານແນວຄິດລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມ, ທີ່ລັດທິປະຕິຮູບສັງຄົມ ແລະ ລັດທິແກ້ຈະບໍ່ເຊື່ອມຈອດເຂົ້າກັນກັບລັດທິ ຕ້ານກອມມູນິດ ໂດຍທາງກົງຫລືທາງອ້ອມ. ຄວາມແຕກຕ່າງກັນມີພຽງແຕ່ໃນດ້ານຮູບການ ແລະ ວິທີການຂອງການຕໍ່ສູ້ຕ້ານບັນດາກຳລັງປະຕິວັດພື້ນຖານ ຂອງຍຸກສະໄໝເທົ່ານັ້ນ. ຈຸດປະສົງທາງຍຸດທະສາດຂອງລັດທິຕ້ານກອມມູນິດ ໃນສະໄໝປະຈຸບັນນີ້ ກໍຄືເກົ່າ ຄືຍັງແມ່ນການຟື້ນຟູບັນດາລະບຽບການທຶນນິ ຍົມຂຶ້ນໃນບັນດາປະເທດສັງຄົມນິຍົມ. ເພື່ອບັນລຸຈຸດປະສົງດັ່ງກ່າວໄດ້ມີການ ບິດເບືອນ, ການຊື້ຈ້າງຈອບອອຍ ຫລາຍຮູບຫລາຍແບບ ແລະ ການຕົວະ ຍົວະໂດຍກົງ. ເລນິນ ໄດ້ຄາດຄະເນຢ່າງປີຊາສາມາດໄວ້ວ່າ ຖ້າຫາກມືຖືອາວຸດຕ້ານສັງຄົມນິຍົມບໍ່ໄດ້ແລ້ວ, ພວກເຂົາຈະໃຊ້ອາວຸດການຕົວະຍົວະຫລອກລວງ ແລະ ການໃສ່ຮ້າຍປ້າຍສີ. ເລື່ອງນີ້ໄດ້ຮັບການຢັ້ງຢືນຢ່າງເຕັມສ່ວນແລ້ວ.

ບັນດາເປົ້າໝາຍພື້ນຖານທີ່ຖືກລັດທິຕ້ານກອມມູນິດຍຸກໂຈມຕີນັ້ນ ກ່ອນອື່ນໝົດແມ່ນສາມກຳລັງພື້ນຖານຂອງຂະບວນການປະຕິວັດໃນຍຸກສະໄໝປະຈຸບັນຄື ສັງຄົມນິຍົມທີ່ແທ້ຈິງ, ຊົນຊັ້ນກຳມະກອນສາກົນ ແລະ ຂະບວນການ ປົດປ່ອຍຊາດ. ປາຍແຫລມຂອງທິດທາງຕົ້ນຕໍໃນລັດທິຕ້ານກອມມູນິດ ໄດ້ ແນໃສ່ບັນດາປະເທດສັງຄົມນິຍົມ ແລະ ກ່ອນອື່ນໝົດ ແມ່ນແນໃສ່ສະຫະພາບ ໂຊວຽດ.

ໃນບັນດາປະເທດວົງຄະນາຍາດສັງຄົມນິຍົມ ເປົ້າໝາຍໂຈມຕີຂອງພວກຕ້ານກອມມູນິດ ກ່ອນອື່ນໝົດ ແມ່ນແນໃສ່ບົດບາດນຳພາຂອງພັກກອມມູນິດ - ແລະ ພັກ ກຳມະກອນ. ບັນດານັກແນວຄິດຂອງລັດທິຕ້ານກອມມູນິດ ເຂົ້າໃຈວ່າ ບັນດາພັກລັດທິມາກ-ເລນິນ ໃນຖານະເປັນກຳລັງນຳພາ ແລະ ຊີ້ນຳໃນການກໍ່ສ້າງສັງຄົມນິຍົມ, ຂະບວນການກຳມະກອນ ແລະ ປົດປ່ອຍຊາດ ນັ້ນ

ແມ່ນກຳລັງແຮງຄືແນວໃດ. ພວກເຂົາຮູ້ວ່າ ບັນດາພັກກອມມູນິດແມ່ນໜຶ່ງໃນຈຳນວນກຳລັງສຳຄັນທີ່ຊຸກດັນຂະບວນວິວັດຂອງການປະຕິວັດ ແລະ ການດັດສ້າງສັງຄົມນິຍົມ, ຮູ້ວ່າໂດຍການນຳພາຂອງບັນດາພັກດັ່ງກ່າວ ອຸ່ນຊຸ່ນກຳມະກອນຖືວ່າ ມີອາວຸດທີ່ເຂັ້ມແຂງແຮງກ້າ ແລະ ຂ້ຽວຂາດໃນການຕໍ່ສູ້ຕ້ານ ຈັກກະພັດນິຍົມ.

ບັນດາຜູ້ປົກປ້ອງລັດທິທຶນນິຍົມ ພາກັນອອກແຮງຢ່າງຫລວງຫລາຍ ເພື່ອຫລຸດຜ່ອນພົນສະທ້ອນ ແລະ ອິດທິພົນຂອງພັກກອມມູນິດໃນບັນດາປະເທດ ສັງຄົມນິຍົມ, ໃນປະເທດຂອງຕົນເອງ ແລະ ໃນທົ່ວໂລກ. ພວກເຂົາເສກສັນ-ປັ້ນເລື່ອງກ່ຽວກັບຄວາມຂັດແຍ່ງ ທີ່ພວກເຂົາຢືນຢັນວ່າ ມີຢູ່ລະຫວ່າງທິດສະດີກ່ຽວກັບພັກຂອງ ກ.ມາກ ແລະ ຂອງ ວ.ອີ.ເລນິນ, ທັງພະຍາຍາມ ຢາກຈະພິສູດວ່າ ເວົ້າລວມແລ້ວ ມາກ ແລະ ອັງແກນບໍ່ໄດ້ເວົ້າເຖິງການ ນຳພາສັງຄົມຂອງພັກ, ພວກເຂົາຍົກເອົາ "ຜະເດັດການພັກ" ທີ່ພວກເຂົາປັ້ນແຕ່ງຂຶ້ນມານັ້ນ ເພື່ອຝືນກັບຜະເດັດການກຳມາຊີບ, ສະແດງຄວາມຫວັງວ່າ ຈະເກີດການເສື່ອມໂຊມຂອງບັນດາພັກລັດທິມາກ-ເລນິນ ແລະ ອື່ນໆ. ພວກສັດຕູຕຳໜິຫລັກມູນພື້ນຖານແຫ່ງການພົວພັນພາຍໃນພັກກອມມູນິດຄືຫລັກການລວມສູນປະຊາທິປະໄຕ, ພ້ອມທັງບັນດາສະຖາບັນທີ່ສຳຄັນທີ່ສຸດຂອງລັດທິລວມ ສູນປະຊາທິປະໄຕ ເຊັ່ນ ການເລືອກຕັ້ງບັນດາອົງການນຳພາຂອງພັກ, ລະບົບລາຍງານ, ລະບຽບວິໄນຂອງພັກ, ສ່ຽງສ່ວນໜ້ອຍປະຕິບັດຕາມສ່ຽງ ສ່ວນຫລາຍ, ລັກສະນະລວມໝູ່ໃນການນຳພາຂອງພັກ, ລັກສະນະເປີດເຜີຍຂອງຊີວິດພັກ ແລະ ອື່ນໆ. ພວກເຂົາໝູນໃຊ້ວິທີການບິດເບືອນ ແລະ ປັ້ນແຕ່ງເຫດການຕົວຈິງ ແລະ ໃສ່ຮ້າຍປ້າຍສີ.

ພວກຕ້ານກອມມູນິດໝູນໃຊ້ພາຫະນະເຊັ່ນດຽວກັນນີ້ ເພື່ອໂຈມຕີປະຊາທິປະໄຕສັງຄົມນິຍົມຢ່າງປ່ວງບ້າ, ໂຈມຕີອິດສະຫລະພາບຂອງສ່ວນບຸກຄົນ,ສິດທິຂອງມະນຸດທີ່ໄດ້ລະບຸໄວ້ ໃນລັດຖະທຳມະນູນຂອງບັນດາປະເທດໃນວົງລະນາຍາດສັງຄົມນິຍົມ. ບັນຫາຊົນຊາດ ມີຖານະພິເສດຢູ່ໃນລັດທິຕ້ານກອມມູນິດ ພວກເຂົາຍົກເອົາລັດທິຊາດນິຍົມ ແລະ ລັດທິໂຊແວງ ມາຝືນກັບຫລັກການສາກົນກຳມາຊີບ ທີ່ຊາວກອມມູນິດໄດ້ປະກາດອອກ, ຍົກເອົາຄວາມເປັນປໍລະປັກກັນຂຶ້ນມາຝືນກັບມິດຕະພາບລະຫວ່າງບັນດາປະຊາຊາດ.

ຊາວກອມມູນິດ ໜູນໃຊ້ແນວຄິດລັດທິມາກ-ເລນິນ ເພື່ອຝືນກັບ ແນວຄິດນາຍທຶນ ແລະ ລັດທິແກ້, ໃຊ້ບັນດາເຫດການຕົວຈິງ ແຫ່ງຊີວິດນັ້ນເອງເພື່ອພິສູດວ່າ ແນວຄິດນາຍທຶນນັ້ນ ແມ່ນສິ່ງຜິດພາດ. ເຊັ່ນ ບໍ່ມີປະເທດໃດໃນ ວົງຄະນາຍາດສັງຄົມນິຍົມມີໄພຫວ່າງງານ, ໃນເວລາດຽວກັນນັ້ນໃນບັນດາ ປະເທດທຶນນິຍົມ ຄົນຫລາຍແສນຫລາຍລ້ານຄົນ ໄດ້ປະສົບເຄາະຮ້າຍ ຈາກໄພ-ຫວ່າງງານ. ໃນບັນດາປະເທດວົງຄະນາຍາດສັງຄົມນິຍົມ ຊາວຜູ້ອອກແຮງ-ງານທຸກຄົນ ມີສິດທິໃນການອອກແຮງງານ, ພັກຜ່ອນ ແລະ ສຶກສາ. ແລະ-ສິດທິດັ່ງກ່າວນີ້ ບໍ່ພຽງໄດ້ຖືກປະກາດອອກມາເທົ່ານັ້ນ, ແຕ່ຍັງໄດ້ຮັບປະ ກັນໃນຕົວຈິງ. ການທີ່ຄົນຢູ່ຮ່ວມກັນໃນໂລກທຶນນິຍົມເປັນສິ່ງກົງກັນຂ້າມກັບ ການຮ່ວມມືແບບເພື່ອນສະຫາຍ ແລະ ການຊ່ວຍເຫລືອຊຶ່ງກັນ ແລະ ກັນໃນ ໂລກສັງຄົມນິຍົມ. ຄວາມອາຄາດບາດໝາງລະຫວ່າງຊົນຊາດ ແລະ ຄວາມແຕກແຍກລະຫວ່າງປະຊາຊົນບັນດາເຊື້ອຊາດ ແລະ ຊົນຊາດໃນເງື່ອນໄຂທຶນນິຍົມເປັນສິ່ງກົງກັນຂ້າມກັບມິດຕະພາບ ລະຫວ່າງປະຊາຊົນທຸກຊົນເຊື້ອຊາດແລະຊົນຊາດໃນບັນດາປະເທດວົງຄະນາຍາດສັງຄົມນິຍົມ. ໂດຍຕອບໂຕ້ຕໍ່ການ ບຸກໂຈມຕີປະຊາທິປະໄຕສັງຄົມນິຍົມ ຊາວຜູ້ອອກແຮງງານໄດ້ຊີ້ແຈງວ່າໃນເງື່ອນໄຂສັງຄົມນິຍົມ ພວກເຂົາເຈົ້າເອງແມ່ນເຈົ້າຂອງປະເທດຊາດຕົນເອງ. ປະຊາທິປະໄຕນາຍທຶນ ຄົງຢູ່ສະເພາະແຕ່ນາຍທຶນ ແລະ ຮັບໃຊ້ໃຫ້ແກ່ຜົນປະ -ໂຫຍດເຫັນແກ່ຕົວຂອງນາຍທຶນ. ປະຊາທິປະໄຕສັງຄົມນິຍົມ ແມ່ນຮູບແບບສູງສຸດຂອງປະຊາທິປະໄຕໃນຈຳນວນທີ່ເຄີຍມີມາໃນປະຫວັດສາດຂອງມວນມະນຸດມັນຮັບໃຊ້ໃຫ້ແກ່ຊາວຜູ້ອອກແຮງງານເອງ, ເປັນຕົວແທນ ແລະ ປົກປັກ ຜົນປະໂຫຍດຂອງພວກເຂົາເຈົ້າໃນຊີວິດຕົວຈິງ.

## ໑. ຫລັກການຂອງເລນິນ ກ່ຽວກັບການຕໍ່ສູ້ຕ້ານກັບແນວຄິດນາຍທຶນແລະລັດທິແກ້.

ໂດຍເສີມຂະຫຍາຍທິດສະດີ ຂອງຜູ້ສ້າງຕັ້ງລັດທິມາກ ແລະ ປົກປັກ ຮັກສາທິດສະດີມາກຈາກການບຸກໂຈມຕີ ຂອງພວກສັດຕູດ້ານແນວຄິດ ວ.ອີ. ເລ

ນິນ ໄດ້ຄົ້ນຄວ້າ ແລະ ວາງພື້ນຖານບັນດາຫລັກການສຳຄັນທີ່ສຸດ ຄືຫລັກການຕໍ່ສູ້ກັບແນວຄິດນາຍທຶນ. ບັນດາຫລັກການມີລັກສະນະກຳມະວິທີວິທະຍາ ແລະ ແມ່ນຫລັກການລວມສຳລັບຕຳຫນິວິຈານທັງທິດທັງແນວຂອງນາຍທຶນ, ກໍຄື ສຳລັບຕຳຫນິວິຈານບັນດາທັດສະນະຫລັກຫມັ້ນປັດຊະຍາ, ສັງຄົມສາດ, ການເມືອງ ແລະ ທຸກໆທັດສະນະຫລັກຫມັ້ນອື່ນໆທີ່ຕ້ານກັບລັດທິມາກ.

ຈຸດເລີ່ມໃນການຕໍ່ສູ້ຕ້ານສັດຕູດ້ານແນວຄິດຂອງລັດທິມາກ-ເລນິນ ແມ່ນຂໍ້ສະຫລຸບຂອງ ເລນິນ ກ່ຽວກັບຄວາມບໍ່ອາດສາມາດຈະຢູ່ຮ່ວມກັນໂດຍສັນຕິລະຫວ່າງແນວຄິດສັງຄົມນິຍົມ ແລະ ນາຍທຶນ. ບັນດານັກແນວຄິດນາຍທຶນ ອ້າງອີງເຖິງຫລັກການຢູ່ຮ່ວມກັນໂດຍສັນຕິລະຫວ່າງລັດທີ່ມີລະບອບສັງຄົມ- ການເມືອງແຕກຕ່າງກັນ, ຫວັງຢາກຍ້າຍຫລັກການນີ້ມາເປັນຫລັກການຢູ່ຮ່ວມ ກັນໂດຍສັນຕິ ລະຫວ່າງບັນດາແນວຄິດທີ່ແຕກຕ່າງກັນ. ແຕ່ອັນນີ້ມັນບໍ່ອາດ ຈະເປັນໄປໄດ້ ເພາະວ່າຜົນປະໂຫຍດພື້ນຖານຂອງບັນດາຊົນຊັ້ນທີ່ເປັນປໍລະປັກ-ກັນບໍ່ອາດສາມາດ ຈະປະນີປະນອມກັນໄດ້. ຜົນປະໂຫຍດ ຂອງຊົນຊັ້ນກຳມະກອນທີ່ມີແນວຄິດລັດທິມາກ-ເລນິນ ເປັນຕົວແທນແລະປົກປັກຮັກສານັ້ນ ເປັນສິ່ງກົງກັນຂ້າມໂດຍກົງກັບຜົນປະໂຫຍດຂອງນາຍທຶນ, ເຊິ່ງມີແນວຄິດນາຍທຶນເປັນຕົວແທນ ແລະ ປົກປັກຮັກສາ. ກະໂຕການຢູ່ຮ່ວມກັນໂດຍສັນຕິລະຫວ່າງລັດທີ່ມີລະບອບສັງຄົມ-ການເມືອງທີ່ແຕກຕ່າງກັນນັ້ນ ຊາວກອມມູນິດຖືເປັນ ຄືຫນຶ່ງໃນບັນດາຮູບແບບຂອງການຕໍ່ສູ້ຊົນຊັ້ນ. ສ່ວນການຕໍ່ສູ້ຊົນຊັ້ນຂອງ ຊົນຊັ້ນກຳມາຊີບ ໃນທີ່ສຸດຕ້ອງກ້າວໄປເຖິງການໂຄ່ນລົ້ມນາຍທຶນ ຄືຊົນຊັ້ນກົດຂີ່ ຂູດຮີດພ້ອມກັນກັບແນວຄິດຂອງມັນ. ດ້ວຍເຫດນັ້ນຈຶ່ງບໍ່ອາດຈະມີຄວາມເວົ້າ ກ່ຽວກັບການຢູ່ຮ່ວມກັນໂດຍສັນຕິ ລະຫວ່າງແນວຄິດຂອງຊົນຊັ້ນກຳມະກອນ ແລະ ແນວຄິດຂອງຜູ້ກົດຂີ່ຂູດຮີດພວກເຂົາເຈົ້າ ຄືນາຍທຶນນັ້ນ ແຕ່ປະການໃດ. ຊາວກອມມູນິດໄດ້ປະກາດວ່າ: "ບໍ່ມີຍາມໃດທີ່ພວກເຮົາຈະມີການປະນີປະນອມໃນບັນຫາແນວຄິດແມ່ນແຕ່ຫນ້ອຍດຽວ" ໑).

ຫລັກການສຳຄັນທີ່ສຸດຂອງການຕໍ່ສູ້ດ້ານແນວຄິດ ແມ່ນຫລັກການລັກສະນະພັກ. ຫລັກການລັກສະນະພັກໃນປັດຊະຍາ ກ່ອນອື່ນຫມົດ ສ່ອງແສງເຖິງການ

---

໑) ລ.ອີ.ເປູສເນັບ.ຕາມເສັ້ນທາງຂອງ ເລນິນ,ເຫລັ້ມ ໝ,ຫນ້າ ໝ໑໐.

ຕໍ່ສູ້ລະຫວ່າງລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມ. ໃນບົດນິພົນ "ລັດທິວັດຖຸນິຍົມ ແລະ ລັດທິບົດຣຽນຕຳໜິວິພາກ" ວ.ອິ.ເລນິນ ໄດ້ຂຽນວ່າ: "ປັດຊະຍາສະໄໝໃໝ່ ກໍ່ມີລັກສະນະພັກເຊັ່ນດຽວກັນກັບ ໃນສະໄໝສອງພັນປີກ່ອນໜ້ານີ້.ບັນດາພັກທີ່ຕໍ່ສູ້ນຳກັນນັ້ນ...ແມ່ນລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມ"໑). ໃນເມື່ອມີຄວາມຈຳເປັນຕ້ອງຕັດສິນຫລັກໜັ້ນໂລກະທັດຂອງນັກປາດຜູ້ນີ້ ຫລືຜູ້ນັ້ນແລ້ວ ກ່ອນອື່ນໝົດຕ້ອງໄຈແຍກວ່າ ຜູ້ກ່ຽວແກ້ໄຂບັນຫາພື້ນຖານຂອງປັດຊະຍາ ຄືແນວໃດ;ນັກປາດຜູ້ນີ້ຢືນຢູ່ໃນຫລັກໜັ້ນຣັບຮູ້ໂລກພາວະວິໄສ ແລະ ບັນດາກົດເກນຂອງມັນຫລືບໍ່ໝາຍຄວາມວ່າ ຢືນຢູ່ໃນຫລັກໜັ້ນລັດທິວັດຖຸນິຍົມ, ຫລືວ່າຜູ້ກ່ຽວປະຕິເສດການຄົງຢູ່ແບບພາວະວິໄສ ຂອງໂລກຮອບຕົວເຂົາ, ໝາຍຄວາມວ່າຢືນຢູ່ໃນຫລັກໜັ້ນລັດທິຈິດຕະນິຍົມ. ແຕ່ລະຫລັກໜັ້ນໃນສອງອັນນີ້ລ້ວນ ແຕ່ແມ່ນຫລັກໜັ້ນພັກ.

ຫລັກການລັກສະນະພັກໄດ້ນຳໄປສູ່ຫລັກການທັດສະນະຊົນຊັ້ນກ່ຽວກັບການວິໄຈບັນດາປະກົດການສັງຄົມ.ປະຫວັດສາດຂອງປັດຊະຍາໄດ້ພິສູດໃຫ້ເຫັນວ່າຕາມຫລັກການແລ້ວ, ໃນທີ່ສຸດຝ່າຍລັດທິວັດຖຸນິຍົມໃນປັດຊະຍາ ເວລາໃດ ກໍ່ເປັນຕົວແທນ ແລະ ໄດ້ປົກປັກຮັກສາຜົນປະໂຫຍດຂອງບັນດາຊົນຊັ້ນ ທີ່ກ້າວໜ້າຢູ່ໃນສັງຄົມ. ກົງກັນຂ້າມ ບັນດານັກລັດທິຈິດ ຕະນິຍົມໄດ້ເປັນຜູ້ ຕາງໜ້າ ແລະ ຜູ້ປົກປ້ອງໃຫ້ແກ່ຜົນປະໂຫຍດຂອງບັນດາຊົນຊັ້ນປະຕິການ ທີ່ໄດ້ຫລ້າຫລັງໄປແລ້ວ, ສາຍພົວພັນແບບກາຍອິນຊີລະຫວ່າງລັກສະນະພັກຂອງປັດຊະຍາກັບການວາງພື້ນຖານ ແລະ ການປົກປັກຮັກສາຜົນປະໂຫຍດຂອງຊົນຊັ້ນນີ້ຫລືບັນດາຊົນຊັ້ນນັ້ນ ໄດ້ສະແດງອອກ ແລະ ພວມສະແດງອອກຢູ່ບ່ອນນີ້ເອງ ປັດຊະຍາເວລາໃດກໍ່ໄດ້ຕິດພັນກັບການພົວພັນສັງຄົມທີ່ມີຢູ່, ຕິດພັນກັບການພົວພັນລະຫວ່າງບັນດາກຸ່ມຄົນໃນສັງຄົມ ແລະຊົນຊັ້ນ, ຕິດພັນກັບຄວາມຮຽກຮ້ອງຕ້ອງການແລະຜົນປະໂຫຍດຂອງພວກເຂົາເຈົ້າ. ວ.ອິ.ເລນິນ ໄດ້ຂຽນວ່າ: "...ລັດທິວັດຖຸນິຍົມ ໄດ້ກວມລວມເອົາ...ລັກສະນະພັກ, ໂດຍຈຳໃຫ້ຕ້ອງຢືນຢູ່ໃນທັດສະນະຂອງກຸ່ມຄົນ ທີ່ແນ່ນອນ ໃນສັງຄົມໂດຍກົງ ແລະຢ່າງ ເປີດ

---

໑) ວ.ອິ.ເລນິນ. ບົດນິພົນຄົບຊຸດ. ເຫລັ້ມ ໑໘, ໜ້າ ໓໘໐.

ເພີຍໃນເມື່ອຕີລາຄາພຸກໆເຫດການ" ໑).

ນັກປາດທີ່ຢືນຢູ່ໃນຫຼັກໝັ້ນລັດທິວັດຖຸນິຍົມສັດຈະວິພາກ ແລະ ປົກປັກ ຮັກສາຜົນປະໂຫຍດຂອງຊົນຊັ້ນກຳມະກອນນັ້ນ ບໍ່ອາດຈະເປັນຜູ້ບໍ່ຍຸດຕິທຳ ໃນການຕີລາຄາບັນດາເຫດການໃນສັງຄົມ. "ບໍ່ມີຜູ້ໃດທີ່ຍັງມີຊີວິດຢູ່ ບໍ່ອາດຈະບໍ່ຢືນຢູ່ໃນຝ່າຍຂອງຊົນຊັ້ນນີ້ ຫລືຊົນຊັ້ນນັ້ນ (ໃນເມື່ອຜູ້ກ່ຽວຫາກເຂົ້າໃຈ ການພົວພັນເຊິ່ງກັນ ແລະ ກັນ ລະຫວ່າງບັນດາຊົນຊັ້ນດັ່ງກ່າວແລ້ວ ), ບໍ່ອາດຈະບໍ່ດີອົກດີໃຈນຳຜົນສຳເລັດຂອງຊົນຊັ້ນດັ່ງກ່າວ, ບໍ່ອາດຈະບໍ່ເສຍໃຈ ນຳການປະລາໄຊຂອງຊົນຊັ້ນ, ບໍ່ອາດຈະບໍ່ຄຽດແຄ້ນຕໍ່ຜູ້ຄົນທີ່ເປັນສັດຕູຂອງ ຊົນຊັ້ນນີ້, ຕໍ່ຜູ້ທີ່ແຜ່ຂະຫຍາຍທັດສະນະທີ່ຫລ້າຫລັງ ເພື່ອກີດຂວາງຄວາມ ກ້າວໜ້າຂອງຊົນຊັ້ນນີ້" ໒).

ການຕໍ່ສູ້ຂອງຊາວກອມມູນິດຕ້ານແນວຄິດນາຍທຶນ ມີລັກສະນະພິເສດຄືທັດສະນະບຸກ ແລະ ສູ້ຊົນ. ໃນການຕໍ່ສູ້ລະຫວ່າງສອງໂລກະທັດ ບໍ່ອາດຈະ ມີບ່ອນໃຫ້ແກ່ລັດທິເປັນກາງ ແລະ ການຜ່ອນສັ້ນຜ່ອນຍາວ. ຢູ່ນີ້ຕ້ອງການໃຫ້ມີສະຕິລະວັງຕົວທາງການເມືອງຢ່າງສູງ, ຕ້ອງດຳເນີນວຽກງານໂຄສະນາ - ຢ່າງຕັ້ງໜ້າ, ຢ່າງຮີບດ່ວນ ແລະ ມີຜົນສັກສິດ, ຕ້ອງຕອບໂຕ້ຢ່າງທັນການຕໍ່ການເຄື່ອນໄຫວມ້າງເພທຳລາຍຂອງແນວຄິດນາຍທຶນ. ທັດສະນະບຸກ ໃນການຕໍ່ສູ້ຕ້ານແນວຄິດນາຍທຶນ ບໍ່ພຽງແຕ່ມີຈຸດປະສົງເພື່ອເພີຍແບ ແລະ ຫັກລ້າງແນວຄິດຂອງບັນດານັກແນວຄິດນາຍທຶນເທົ່ານັ້ນ, ແຕ່ຍັງມີຈຸດປະສົງ ຈຳໃຫ້ພວກແນວຄິດນາຍທຶນຕ້ອງອະທິບາຍບັນດາບັນຫາທີ່ໄດ້ຍົກຂຶ້ນມາໂດຍກະໂຕຊີວິດ, ໂດຍຂະບວນວິວັດແຫ່ງການປະຕິວັດໃນຍຸກສະໄໝປະຈຸບັນ, ໂດຍບັນດາຄວາມຂັດແຍ່ງໃນໂລກທຶນນິຍົມ, ໂດຍບົດຮຽນຂອງການສ້າງສັງຄົມ ນິຍົມຕົວຈິງ, ໂດຍພຶດຕິກຳຕົວຈິງຂອງການກໍ່ສ້າງກອມມູນິດນິຍົມ, ໂດຍການ ຕໍ່ສູ້ລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມໃນຂະໜາດທົ່ວໂລກ.

ຫລັກການທີ່ສຳຄັນທີ່ສຸດໃນວຽກງານດ້ານແນວຄິດທັງໝົດ ຂອງພັກກອມມູນິດ ແລະ ພັກກຳມະກອນ ແມ່ນຫລັກການພົວພັນກັນລະຫວ່າງທິດສະດີກັບຊີວິດ

---

໑) ວ.ອີ.ເລນິນ.ບົດນິພົນ ຄົບຊຸດ, ເຫລັ້ມ ໑, ໜ້າ ໔໑໗.

໒) ວ.ອີ.ເລນິນ. ບົດນິພົນຄົບຊຸດ, ເຫລັ້ມ ໒, ໜ້າ ໕໔໓-໕໔໙.

ກັບພຶດຕິກຳຕົວຈິງຂອງການກໍ່ສ້າງກອມມູນິດນິຍົມ. ໃນການຕໍ່ສູ້ຕ້ານສັດຕູດ້ານແນວຄິດຂອງລັດທິມາກ-ເລນິນ ຫຼັກການນີ້ ໄດ້ວາງເປົ້າໝາຍ ໃຫ້ສະແດງຄວາມເດັ່ນເລີດຂອງສັງຄົມນິຍົມຕົວຈິງ, ຂອງແບບແຜນ ດຳລົງຊີວິດແບບສັງຄົມນິຍົມ, ສະແດງຄວາມຍິ່ງໃຫຍ່ຂອງຄົນອອກແຮງງານ. ພ້ອມກັນນັ້ນ ຫຼັກການນີ້ຮຽກຮ້ອງໃຫ້ໄຈ້ແຍກຢ່າງເລິກເຊິ່ງບັນດາຄວາມຂັດແຍ່ງໃນໂລກ ປະຈຸບັນ, ເຜີຍແບຄວາມເປື່ອຍເນົ່າຂອງໂລກທຶນນິຍົມ, ການເສື່ອມໂຊມຂອງວັດທະນະທຳນາຍທຶນ ແລະ ຄວາມເປື່ອຍເຍື່ອຍຂອງພື້ນຖານສິນທຳທຶນນິຍົມ. ຫຼັກການພົວພັນກັບຊີວິດວາງເປົ້າໝາຍໃຫ້ເຜີຍແບການບຸກເບີກການ ຂະຫຍາຍຕົວຂອງສັງຄົມ, ເຜີຍແບການສ່ອງແສງແບບປອມແປງຄວາມຈິງກ່ຽວກັບທາດແທ້ຂອງຄົນ, ເຮັດໃຫ້ຄົນຫ່າງເຫີນອອກຈາກການແກ້ໄຂບັນຫາທີ່ສຳຄັນ ໂດຍແມ່ນຊີວິດຕົວຈິງເປັນຜູ້ຍົກຂຶ້ນມາ.

ບົດບາດອັນໃຫຍ່ຫລວງໃນການຕຳໜິວິຈານແນວຄິດນາຍທຶນ ໄດ້ແກ່ການເສີມຂະຫຍາຍ ກະໂຕທິດສະດີ ມາກ-ເລນິນ. ວ.ອີ.ເລນິນໄດ້ສັ່ງສອນວ່າ ພວກເຮົາບໍ່ຄວນຖືວ່າທິດສະດີຂອງມາກ ເປັນຄືສິ່ງທີ່ສົມບູນ ແລະ ແຕະຕ້ອງບໍ່ໄດ້. ເລນິນ ໄດ້ຂຽນວ່າ ທິດສະດີຂອງ ມາກ ໄດ້ສ້າງພຽງແຕ່ຫີນສີລາແຫ່ງວິທະຍາສາດ ທີ່ຊາວກອມມູນິດຕ້ອງຊຸກຍູ້ໃຫ້ຄືບໜ້າຕໍ່ໄປໃນທຸກໆທິດທາງ, ຖ້າຫາກພວກເຂົາເຈົ້າບໍ່ຢາກຫລ້າຫລັງໃນຊີວິດ.

ພ.ກ.ສ.ຊ. ແລະ ບັນດາພັກອ້າຍນ້ອງອື່ນໆ ປະຕິບັດຕາມຄຳສອນ ດັ່ງກ່າວຂອງ ເລນິນ ຢູ່ເປັນປະຈຳ. ການເສີມຂະຫຍາຍທິດສະດີ ມາກ-ເລນິນ ໃນດ້ານໜຶ່ງມີຈຸດປະສົງໃຫ້ເຫັນແຈ້ງທາດແທ້ ແລະ ເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງມູນມໍລະດົກທາງທິດສະດີຂອງບັນດາຜູ້ສ້າງຕັ້ງລັດທິມາກ-ເລນິນ ອີກດ້ານໜຶ່ງ ກໍຕ້ອງຄົ້ນຄວ້າບັນດາຂະບວນວິວັດຂອງຍຸກສະໄໝ. ໃນບົດລາຍງານຂອງສູນກາງພັກ ຕໍ່ກອງປະຊຸມໃຫຍ່ຄັ້ງທີ ໒໖ ພ.ກ.ສ.ຊ. ໄດ້ຊີ້ແຈງວ່າ: "ພັກມາກ-ເລນິນ ບໍ່ສາມາດປະຕິບັດບົດບາດຂອງຕົນໄດ້ ຖ້າຫາກພັກບໍ່ເອົາໃຈໃສ່ຊາບຊຶ້ງທຸກຢ່າງທີ່ເກີດຂຶ້ນຢ່າງເໝາະສົມ, ບໍ່ເອົາໃຈໃສ່ສັງລວມບັນດາປະກົດການໃໝ່ໃນຊີວິດ, ບໍ່ເອົາໃຈໃສ່ເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງທິດສະດີ ມາກ-ເລນິນ" ໑).

---

໑) ເອກະສານກອງປະຊຸມໃຫຍ່ຄັ້ງທີ ໒໖ ພ.ກ.ສ.ຊ. ໜ້າ ໗໗.

ຄວາມສຳເລັດໃນການເຜີຍແບ ແລະ ໃນການພິສູດຄວາມຜິດຂອງທິດສະດີ ແລະ ທັດສະນະຫລັກໝັ້ນທີ່ຕ້ານລັດທິມາກ ຂຶ້ນກັບບັນຫາວ່າ ຜູ້ຕຳໜິ ວິຈານຮູ້ຈັກສັດຕູທາງດ້ານແນວຄິດ ຂອງຕົນໄດ້ເລິກເຊິ່ງພຽງໃດ: ເຊັ່ນທັດສະນະໃນເບື້ອງຕົ້ນຂອງສັດຕູເປັນຄືແນວໃດ, ສັດຕູປົກປັກຮັກສາຜົນປະໂຫຍດຂອງໃຜ ແລະ ການໄຕ່ຕອງຂອງສັດຕູມີຕັກກະສາດຂະໜາດໃດ. ເພື່ອ ຫັກລ້າງທິດສະດີນີ້ຫລືທິດສະດີນັ້ນ ຈະຕີລາຄາແຕ່ລັກສະນະບໍ່ມີວິທະຍາສາດ, ຂັດແຍ່ງ, ຫລືປະຕິການຂອງມັນແມ່ນບໍ່ພຽງພໍ, ຈຳເປັນຕ້ອງຊີ້ແຈງໃຫ້ເຫັນ ລັກສະນະໄຮ້ຕັກກະສາດຂອງທິດສະດີດັ່ງກ່າວ, ເຜີຍແບຄວາມຂັດແຍ່ງພາຍ ໃນຂອງມັນ, ພິສູດວ່າຂໍ້ວິນິດໄສ ແລະ ຂໍ້ສະຫລຸບຂອງມັນບໍ່ສອດຄ່ອງກັບສະພາບການຕົວຈິງ, ບໍ່ສອດຄ່ອງກັບຜົນສຳເລັດຂອງວິທະຍາສາດສະໄໝໃໝ່, ຕົວຢ່າງ ແລະ ແບບຢ່າງທີ່ໃສແຈ້ງທີ່ສຸດຂອງທັດສະນະຕໍ່ການຕຳໜິວິຈານ ດັ່ງນີ້ແມ່ນບົດນິພົນຂອງ ກ.ມາກ, ຟ.ອັງແກນ ແລະ ວ.ອີ.ເລນິນ.

ພັກກອມມູນິດ ແລະ ພັກກຳມະກອນພູກງພັກມີໜ້າທີ່ຕ້ອງເຜີຍແບຢ່າງ ມີເຫດມີຜົນ ແນວຄິດນາຍທຶນ ແລະ ລັດທິແກ້, ຕອບໂຕ້ຢ່າງຊຳນິຊຳນານ ຕໍ່ການໂຈມຕີຂອງພວກຕ້ານກອມມູນິດທີ່ແນໃສ່ສັງຄົມນິຍົມ ແລະ ໂລກະທັດມາກ-ເລນິນ ຂອງສັງຄົມນິຍົມ. ທ່ານໄກສອນ ພົມວິຫານຂຽນວ່າ: "...ຕ້ອງມີສະຕິລະວັງຕົວໃນການກັ້ນກາງ ແລະ ຕໍ່ສູ້ຢ່າງເດັດດ່ຽວ ຕ້ານພູກຜົນສະທ້ອນຈາກແນວຄິດທັດສະນະທີ່ຜິດພາດ, ປະຕິການຂອງລັດທິສວຍໂອກາດ ພາຍໃຕ້ພູກຮູບພູກສີ, ແກ້ໄຂປະກົດການໄຝ່ຝັນ, ມົວເມົາ, ລັ່ງໆເລໆ, ອຽງຂວາຕໍ່ຈັກກະພັດນິຍົມ ແລະ ອິດທິກຳລັງປະຕິການສາກົນ, ຕັ້ງໜ້າຕໍ່ສູ້ເພື່ອ ປົກປັກຮັກສາຄວາມຜ່ອງໃສຂອງລັດທິມາກ-ເລນິນ ແລະ ລັດທິສາກົນກຳມາຊີບ"໑).

## ໔. ການຕຳໜິວິຈານທິດທາງ ແລະ ທັດສະນະຫລັກໝັ້ນພື້ນຖານຂອງແນວຄິດນາຍທຶນ ແລະ ລັດທິແກ້.

ແນວຄິດນາຍທຶນໃນສະໄໝປະຈຸບັນນີ້ ໄດ້ຍົກເອົາທັດສະນະ ຫລັກໝັ້ນ

---

໑) ໄກສອນ ພົມວິຫານ.ບາງບົດຮຽນຕົ້ນຕໍ...ຂອງການປະຕິວັດລາວ.ໜ້າ ໝ໗໘-໗໙.

ແລະທິດສະດີຈຳນວນໜຶ່ງມາຝືນກັບທິດສະດີ ມາກ-ເລນິນ ກ່ຽວກັບສັງຄົມ*. ໃນນັ້ນ ມີທິດສະດີເຊັ່ນ: ທິດສະດີກ່ຽວກັບສັງຄົມ "ອຸດສາຫະກຳເອກະພາບ" ແລະ ສັງຄົມ "ຖັດຈາກອຸດສາຫະກຳຂະຫຍາຍຕົວ", ທິດສະດີ "ເຊື່ອມຈອດເຂົ້າກັນ", ສັງຄົມສາດ ບົດຮຽນນິຍົມ, ທິດສະດີ "ເສື່ອມເສຍແນວຄິດ" ແລະ ທິດສະດີ "ຟື້ນຟູແນວຄິດ" ແລະ ອື່ນໆ. ເນື້ອໃນພື້ນຖານຂອງທຸກໆທິດສະ ດີເຫລົ່ານີ້ ແມ່ນລັດທິຕ້ານກອມມູນິດທີ່ສະແດງອອກຢ່າງຈະແຈ້ງ ຫລືຢ່າງ ສະຫລັບສັບຊ້ອນ.

ປະຈຸບັນນີ້ ບັນດານັກແນວຄິດນາຍທຶນໄດ້ສຸມກຳລັງແຮງຕົ້ນຕໍແນໃສ່ ເພື່ອຫັກລ້າງທິດສະດີ ມາກ-ເລນິນ ກ່ຽວກັບລັກສະນະເປັນກົດເກນທີ່ມວນ ມະນຸດຂ້າມຜ່ານຈາກຮູບຖານຈັດຕັ້ງສັງຄົມ ເສດຖະກິດ ທີ່ຕ່ຳ ກ້າວຂຶ້ນສູ່ຮູບຖານຈັດຕັ້ງທີ່ສູງກວ່າ, ຂ້າມຜ່ານແຕ່ທຶນນິຍົມ ຂຶ້ນສູ່ສັງຄົມນິຍົມ. ພວກເຂົາທັງ ໝົດພະຍາຍາມຢາກພິສູດວ່າ ບໍ່ຈຳເປັນຕ້ອງມີການດັດສ້າງສັງຄົມແບບປະຕິວັດ,ພິສູດໃຫ້ເຫັນລັກສະນະຕະຫລອດການຂອງລັດທິທຶນນິຍົມ. ເຊັ່ນ ນັກປາດ ຊາວອາເມລິກາ ອູ.ໂຣສໂຕອູ ໄດ້ຍົກທິດສະດີກ່ຽວກັບ "ໄລຍະຕ່າງໆໃນການຂະຫຍາຍຕົວດ້ານເສດຖະກິດ" ຂຶ້ນມາເພື່ອຝືນກັບທິດສະດີຂອງ ກ.ມາກ ກ່ຽວກັບຮູບຖານຈັດຕັ້ງສັງຄົມ-ເສດຖະກິດ. ຖ້າຫາກ ມາກອະທິບາຍວ່າ ຍ້ອນມີ-ການປ່ຽນແປງແບບວິທີການຜະລິດ ຈຶ່ງເກີດມີການປ່ຽນແທນບັນດາຮູບຖານຈັດຕັ້ງ, ສ່ວນໂຣສໂຕອູ ບໍ່ໄດ້ຍົກມາດຕະເກນຂອງການປ່ຽນແປງ "ໄລຍະຕ່າງຕ່າງ" ແມ່ນແຕ່ປະການໃດເລີຍ. ໃນຈຳນວນມາດຕະເກນທີ່ຈຳແນກ"ໄລຍະຕ່າງໆ" ນັ້ນ ເຂົາໄດ້ຊີ້ແຈງວ່າ ມັນແມ່ນເຄື່ອງມືການອອກແຮງງານ, ພູດສ່ວນໃນລາຍໄດ້ແຫ່ງຊາດສຳລັບການສະສົມ, ລະດັບການຫັນເປັນອຸດສາຫະ-ກຳຂອງປະເທດ,ລະດັບການຊົມໃຊ້,ຈັງຫວະຂອງການກຳເນີດ. ໂດຍຄົ້ນຄວ້າທຶນນິຍົມ ແລະ ສັງຄົມນິຍົມນັ້ນ ໂຣສໂຕອູ ຢືນຢູ່ແຕ່ໃນທັດສະນະລະດັບ ການຂະຫຍາຍຕົວດ້ານເຕັກນິກ, ດ້ານເຄື່ອງມືອອກແຮງງານເທົ່ານັ້ນ, ໝາຍຄວາມວ່າ ຢືນຢູ່ໃນທັດສະນະ "ສັງຄົມອຸດສາຫະກຳເອກະພາບ"ແລະ ປະຕິ

---

*) ການວິຈານທັດສະນະປັດຊະຍາຂອງນາຍທຶນ ໃນສະໄໝປະຈຸບັນນີ້ໄດ້ສະເໜີໃນພາກທີໜຶ່ງຂອງປຶ້ມເຫລັ້ມນີ້.

ເສດການວິໄຈການພົວພັນແຫ່ງການຜະລິດ.

ຈົນເຖິງກາງສະຕະວັດທີ ໒໐ ວິທະຍາສາດສັງຄົມຂອງນາຍທຶນບໍ່ໄດ້ມີທິດສະດີທີ່ຄາດຄະເນສັງຄົມໃນອະນາຄົດ. ສ່ວນຊາວກອມມູນິດໄດ້ມີທິດສະດີ ດັ່ງນີ້ ນັບແຕ່ມີໄດ້ພິມເຜີຍແຜ່ "ຄຳຖະແຫລງການຂອງພັກກອມມູນິດ" ໃນປີ໑໘໔໘ ທີ່ ກ.ມາກ ແລະ ຝ.ອັງແກນ ເປັນຜູ້ແຕ່ງ. ນັບແຕ່ສະຕະວັດທີ ໒໐ ເປັນຕົ້ນມາ ບັນດານັກປາດນາຍທຶນພາກັນເພີ່ມທະວີການຄົ້ນຄວ້າທິດສະດີສັງຄົມໃນອະນາຄົດ, ໝາຍຄວາມວ່າ ການສຳນຶກກ່ຽວກັບສັງຄົມໃນອະນາຄົດ. ໜຶ່ງໃນຈຳນວນທິດສະດີ ສັງຄົມໃນອະນາຄົດນັ້ນ ແມ່ນ "ສັງຄົມຖັດຈາກອຸດສາຫະກຳຂະຫຍາຍຕົວ". ຕາມທິດສະດີນີ້ແລ້ວ ແມ່ນວ່າການຂະຫຍາຍຕົວຂອງແຕ່ລະສັງຄົມຕັດສິນດ້ວຍລະດັບການຂະຫຍາຍຕົວດ້ານອຸດສາຫະກຳ. ບັນດາຈຸດພິເສດພື້ນຖານຂອງ "ສັງຄົມຖັດຈາກອຸດສາຫະກຳຂະຫຍາຍຕົວ" ແມ່ນ: ຈຳນວນຄົນໃນຂົງເຂດການຮັບໃຊ້ກວມຈຳນວນສ່ວນຫລວງຫລາຍ ຂອງຄົນເຮັດວຽກ, ການຫລຸດຜ່ອນຈຳນວນຂອງພວກເຂົາເຈົ້າ ໃນຂົງເຂດການຜະລິດອຸດສາຫະກຳ ແລະ ໂດຍສະເພາະໃນການຜະລິດກະສິກຳ, ການທີ່ສັງຄົມ ເນັ້ນຄວາມເອົາໃຈໃສ່ໃນການກໍ່ສ້າງບຸກຄົນຜູ້ມີຄວາມສາມາດຍອດຢ້ຽມດ້ານ ເຕັກນິກ (ວິສະວະກອນທີ່ມີຄວາມຊຳນິຊຳນານສູງ), ການທີ່ວິທະຍາສາດ ໃຫ້ກາຍເປັນກຳລັງແຫ່ງການຜະລິດໂດຍກົງ, ການຫັນການຜະລິດໃຫ້ເປັນລະບົບອັດຕະໂນມັດຢ່າງເຕັມສ່ວນ, ການຍຸດຕິການເພີ່ມທະວີຈຳນວນພົນລະເມືອງ-ແລະ ອື່ນໆ. ທິດສະດີແບບ ໄຟຝັນດັ່ງກ່າວບໍ່ຄຳນຶງເຖິງບັນດາກົດເກນ ພາວະວິໄສຂອງການຂະຫຍາຍຕົວດ້ານສັງຄົມ, ມັນບິດບັງບັນຫາກ່ຽວກັບກຳມະສິດສ່ວນຕົວ, ກ່ຽວກັບການປ່ຽນແປງດ້ານສັງຄົມ-ການເມືອງໃນສັງຄົມ. ສັງຄົມ "ຖັດຈາກອຸດສາຫະກຳຂະຫຍາຍຕົວ" ແມ່ນສັງຄົມທຶນນິຍົມທີ່ມີຜູ້ກົດຂີ່ ຂູດຮີດ ແລະ ຜູ້ຖືກກົດຂີ່ຂູດຮີດ.

ພື້ນຖານຂອງທິດສະດີສັງຄົມ "ອຸດສາຫະກຳເອກະພາບ" ແລະ ສັງຄົມ "ຖັດຈາກອຸດສາຫະກຳ ຂະຫຍາຍຕົວ" ແມ່ນທິດສະດີ "ນິຍົດນິຍົມວິທະຍາການ". ຕາມທິດສະດີ "ນິຍົດນິຍົມວິທະຍາການ" ແລ້ວ ການຂະຫຍາຍ ຕົວດ້ານເຕັກນິກເປັນສິ່ງກຳນົດຢ່າງຂາດຕົວສຳລັບການຂະຫຍາຍຕົວດ້ານສັງຄົມ. ພື້ນຖານຂອງການຂະຫຍາຍຕົວດ້ານເຕັກນິກນັ້ນບໍ່ແມ່ນຄວາມຕ້ອງການໃນດ້ານ

ການຂະຫຍາຍຕົວຂອງການຜະລິດດັ່ງທີ່ລັດທິມາກໄດ້ສັ່ງສອນໄວ້, ຫາກແມ່ນວິທະຍາສາດ. ດັ່ງນັ້ນເຖິງແມ່ນວ່າປັດໄຈວັດຖຸ (ເຕັກນິກ )ມີບົດບາດຕັດສິນ ຊີ້ຂາດໃນການຂະຫຍາຍຕົວດ້ານສັງຄົມກໍ່ຕາມ, ແຕ່ຜູ້ຍຶດຖືທິດສະດີດັ່ງກ່າວຍືນຢູ່ໃນຫລັກຫມັ້ນຈິດຕະນິຍົມ. ບັນດາຜູ້ຕາງຫນ້າຂອງທິດສະດີນີ້ (ແລະອັນນີ້ແມ່ນສິ່ງທີ່ສຳຄັນ ) ພາກັນຢັ້ງຢືນວ່າ ພຽງແຕ່ຜົນຂອງການຂະຫຍາຍຕົວດ້ານວິທະຍາສາດ ແລະ ເຕັກນິກ ໂດຍປາສະຈາກການຕໍ່ສູ້ຊົນຊັ້ນ ແລະ ການປະຕິວັດສັງຄົມ, ປາສະຈາກການປ່ຽນແທນກຳມະສິດທຶນນິຍົມສ່ວນຕົວ ດ້ວຍ ກຳມະສິດປວງຊົນເທົ່ານັ້ນ ສັງຄົມກໍ່ສາມາດກ້າວຂຶ້ນສູ່ສະພາບການໃຫມ່ດ້ານຄຸນນະພາບ. ແຕ່ລັດທິມາກ-ເລນິນ ໄດ້ພິສູດ ແລະ ຊີວິດໄດ້ຢັ້ງຢືນໃຫ້ເຫັນວ່າການຂ້າມຜ່ານດ້ານຄຸນນະພາບຈາກສັງຄົມຫນຶ່ງ ກ້າວຂຶ້ນສູ່ອີກສັງຄົມຫນຶ່ງ, ຈາກຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ຫນຶ່ງຂຶ້ນສູ່ຮູບຖານຈັດຕັ້ງອີກອັນຫນຶ່ງນັ້ນ ສາມາດດຳເນີນໄປໄດ້ກໍ່ພຽງແຕ່ຍ້ອນມີການປະຕິວັດສັງຄົມເທົ່ານັ້ນ. ສ່ວນກຳລັງຊຸກດັນຂອງການຂະຫຍາຍຕົວດ້ານສັງຄົມ ໃນທຸກໆຮູບຖານຈັດຕັ້ງທີ່ມີ ຄວາມເປັນປໍລະປັກກັນນັ້ນ ແມ່ນການຕໍ່ສູ້ຊົນຊັ້ນລະຫວ່າງຜູ້ຖືກກົດຂີ່ຂູດຣີດ ແລະຜູ້ກົດຂີ່ຂູດຣີດ.

ໃນບັນດາທິດສະດີສັງຄົມໃນອະນາຄົດ ຂອງນາຍທຶນ ທີ່ໄດ້ອີງໃສ່ທິດສະດີນິຍັດນິຍົມວິທະຍາການນັ້ນ ມີສອງທັດສະນະທີ່ກົງກັນຂ້າມກັນ: ແບບສູຂະທັດນິຍົມ ແລະ ທຸຂະທັດນິຍົມ. ທັດສະນະສູຂະທັດນິຍົມ ເລີ່ມຈາກຈຸດທີ່ວ່າ ການ-ປະຕິວັດວິທະຍາສາດ-ເຕັກນິກ ໂດຍບໍ່ເຮັດໃຫ້ສັງຄົມກະທົບກະເທືອນແມ່ນແຕ່ປະການໃດນັ້ນ ຈະແກ້ໄຂທຸກໆຄວາມຂັດແຍ່ງ ແລະ ບັນຫາຂອງລັດທິທຶນນິຍົມ. ແຕ່ຊີວິດໄດ້ສະແດງໃຫ້ເຫັນວ່າ ຄວາມກ້າວຫນ້າທາງດ້ານວິທະຍາສາດ ແລະ ເຕັກນິກບໍ່ພຽງແຕ່ບໍ່ອຳນວຍເງື່ອນໄຂສະດວກໃຫ້ແກ່ການແກ້ໄຂບັນດາ ຂໍ້ຂັດແຍ່ງຂອງລັດທິທຶນນິຍົມ, ແຕ່ກົງກັນຂ້າມ ຊ້ຳພັດເຮັດໃຫ້ມັນຮ້າຍແຮງຂຶ້ນແລະບັນຫາໄດ້ຕັ້ງຂຶ້ນ ກ່ຽວກັບການປ່ຽນແທນ ການພົວພັນດ້ານສັງຄົມແບບທຶນນິຍົມດ້ວຍການພົວພັນແບບສັງຄົມນິຍົມ. ຈາກນັ້ນທັດສະນະແບບສູຂະທັດນິຍົມ ໄດ້ປ່ຽນເປັນທັດສະນະທຸຂະທັດນິຍົມ. ຈາກການຍ້ອງຍໍສັນລະເສີນ ຄວາມ ກ້າວຫນ້າດ້ານວິທະຍາສາດ-ເຕັກນິກ ບັນດານັກສັງຄົມສາດນາຍທຶນໄດ້ປ່ຽນມາປ້ຽດ່າຄວາມກ້າວຫນ້າດັ່ງກ່າວ. ພວກເຂົາປະກາດວ່າ ການຂະຫຍາຍຕົວດ້ານວິ

ທະຍາສາດ ແລະ ເຕັກນິກເຮັດໃຫ້ຄົນກາຍເປັນຂ້າທາດ, ສູນເສຍອິດສະຫຼະພາບ ແລະ ນຳໄປເຖິງຄວາມຕາຍ.

ມາເຖິງ ໄລຍະຫລັງນີ້ "ທິດສະດີເຊື່ອມຈອດເຂົ້າກັນ" ມີທີ່ຕັ້ງສຳຄັນໃນທິດສະດີສັງຄົມສາດຂອງນາຍທຶນ. ທິດສະດີນີ້ໄດ້ບັນລຸຄວາມຈະເລີນ ຮຸ່ງເຮືອງໃນຊຸມປີ ໕໐–໖໐. ນັບແຕ່ທ້າຍຊຸມປີ ໑໙໖໐ ເປັນຕົ້ນມາ ຄວາມນິຍົມຊົມຊອບຕໍ່ທິດສະດີນີ້ໄດ້ຫລຸດຜ່ອນລົງຫລາຍ. ແຕ່ວ່າຈົນເຖິງດຽວນີ້ມັນກໍຍັງສືບຕໍ່ມີບົດບາດທີ່ແນ່ນອນໃນການຕໍ່ສູ້ດ້ານແນວຄິດ. ຕາມທິດສະດີນີ້ແລ້ວ ຄວາມແຕກຕ່າງກັນດ້ານເສດຖະກິດ, ການເມືອງ ແລະ ແນວຄິດລະຫວ່າງລະ ບົບທຶນນິຍົມແຫ່ງໂລກ ແລະ ສັງຄົມນິຍົມແຫ່ງໂລກ ຄ່ອຍໆຫລຸດຜ່ອນລົງ ແລະ ມີທ່າ ອຽງໄປສູ່ການເຊື່ອມຈອດເຂົ້າກັນຢ່າງສົມບູນ. ບັນດາຜູ້ສ້າງຕັ້ງທິດສະດີເຊື່ອມຈອດເຂົ້າກັນ ຢືນຢັນວ່າ ລັດທິທຶນນິຍົມ ຄືວ່າຈະຮັບເອົາບາງຈຸດ ພິເສດຂອງສັງຄົມນິຍົມ (ເຊັ່ນຕົວຢ່າງ ການວາງແຜນເສດຖະກິດ), ແລະສັງຄົມນິຍົມຈະຮັບເອົາຈຸດພິເສດຂອງທຶນນິຍົມ (ຄືກຳໄລ, ການພົວພັນດ້ານ ສິນຄ້າ–ເງິນ ).

ໃນຕົວຈິງແລ້ວ ບໍ່ອາດຈະມີການເຊື່ອມຈອດເຂົ້າກັນຫລືການໂຮມເຂົ້າກັນເປັນອັນດຽວລະຫວ່າງສັງຄົມນິຍົມ ແລະ ທຶນນິຍົມແຕ່ປະການໃດ, ເນື່ອງຈາກວ່າຈະທ້ອນໂຮມສິ່ງທີ່ບໍ່ສາມາດໂຮມເຂົ້າກັນນັ້ນແມ່ນບໍ່ໄດ້ເຊັ່ນ ກຳມະສິດປວງຊົນ ແລະ ກຳມະສິດສ່ວນຕົວ, ຜົນປະໂຫຍດຂອງນາຍທຶນກັບຂອງກຳມະກອນທີ່ຖືກປົດປ່ອຍອອກຈາກການກົດຂີ່ຂູດຮີດ.

ໜຶ່ງໃນທິດທາງນຳໜ້າຂອງສັງຄົມສາດ ຂອງພວກນາຍທຶນໃນສະໄໝ-ປະຈຸບັນນີ້ແມ່ນ ສັງຄົມສາດ ບົດຮຽນນິຍົມ. ເປົ້າໝາຍແຫ່ງການຄົ້ນຄວ້າ-ຂອງມັນແມ່ນບາງດ້ານ ແລະ ບາງປະກົດການໃນຊີວິດສັງຄົມ, ໃນນັ້ນບໍ່ເອົາໃຈໃສ່ຕໍ່ການພົວພັນແຫ່ງການຜະລິດ. ຕົວແທນຂອງສັງຄົມສາດ ບົດຮຽນນິຍົມໄດ້ປະຕິເສດກົດເກນພາວະວິໄສຂອງການຂະຫຍາຍຕົວທາງສັງຄົມ.

ໃນຊຸມປີ ໖໐–໗໐ ບັນດາປະເທດທຶນນິຍົມໃນຕາເວັນຕົກ ພາກັນ ນິຍົມເຊື່ອຖືທິດສະດີເສື່ອມເສຍແນວຄິດຢ່າງກວ້າງຂວາງ ໝາຍຄວາມວ່າທິດສະດີ

ວ່າດ້ວຍການສົມສູດຂອງແນວຄິດ. ຜູ້ສະໜັບສະໜູນທິດສະດີດັ່ງກ່າວນີ້ໄດ້ປະກາດວ່າລະບົບແນວຄິດ ແມ່ນສະຕິທີ່ຈອມປອມແລະ ທີ່ບິດເບືອນ, ວ່າມັນ ບໍ່ອາດຈະຢູ່ຮ່ວມກັນກັບວິທະຍາສາດ ແລະ ພຽງແຕ່ຮັບໃຊ້ສຳລັບການແກ້ຕົວໃຫ້ແກ່ຈຸດປະສົງ ແລະ ການກະທຳຂອງກຸ່ມຄົນໃນສັງຄົມກຸ່ມນີ້ ຫລືກຸ່ມອື່ນເທົ່ານັ້ນ. ມີການປະກາດວ່າ ແນວຄິດໄດ້ສູນສົ້ນໄປແລ້ວ. ມີການສະເໜີໃຫ້ແກ້ໄຂທຸກໆບັນຫາຂອງສັງຄົມນາຍທຶນດ້ວຍບັນດາພາຫະນະ ເຕັກນິກອ້ອຍຕ້ອຍ ໂດຍ ບໍ່ມີການເຂົ້າຮ່ວມຂອງຊາວຜູ້ອອກແຮງງານ, ປາສະຈາກການຕໍ່ສູ້ຊົນຊັ້ນ ແລະ ການດັດສ້າງປະຕິວັດ.

ບັນດາຜູ້ສະໜັບສະໜູນທິດສະດີເສື່ອມເສຍແນວຄິດອະທິບາຍວ່າແນວຄິດໃນບັນດາປະເທດວົງຄະນາຍາດສັງຄົມນິຍົມຄືຈັ່ງວ່າໄດ້ສູນຫາຍໄປແລ້ວ ຍ້ອນວ່າລັດທິມາກຄືຈັ່ງວ່າເປັນແນວຄິດທີ່ພົ້ນສະໄໝໄປແລ້ວ. ພວກເຂົາປະກາດ-ວ່າ ມາກ ໄດ້ກໍ່ສ້າງທິດສະດີຂອງຕົນໃນສະໄໝກວ່າໜຶ່ງຮ້ອຍປີມາແລ້ວ , ສ່ວນລັດທິເລນິນ ແມ່ນການໝູນໃຊ້ລັດທິມາກໃນປະເທດກະສິກຳທີ່ຫລ້າຫລັງ. ແຕ່ເນື່ອງຈາກວ່າໃນທຸກມື້ນີ້ລັດເຊຍ ເປັນປະເທດອຸດສາຫະກຳທີ່ກ້າວໜ້າ , ດັ່ງນັ້ນລັດທິມາກ-ເລນິນ ຄືຈັ່ງວ່າບໍ່ມີບ່ອນອີງແລ້ວຢູ່ໃນສະຫະພາບໂຊວຽດ.

ຫາກແຕ່ຄວາມຫວັງຂອງພວກສະໜັບສະໜູນທິດສະດີເສື່ອມເສຍແນວຄິດຢາກແກ້ໄຂທຸກໆບັນຫາດ້ວຍວິທີທາງເຕັກນິກນັ້ນ ບໍ່ປະກົດເປັນຈິງ. ການ ຕໍ່ສູ້ຊົນຊັ້ນໃນບັນດາປະເທດທຶນນິຍົມບໍ່ພຽງແຕ່ບໍ່ໄດ້ຍຸດຕິລົງໄປ, ແຕ່ຍັງໄດ້ເພີ່ມ-ທະວີຂຶ້ນອີກ. ອັນນີ້ເອງໄດ້ພິສູດຄວາມຖືກຕ້ອງຂອງຂໍ້ສະຫລຸບທິດສະດີ ລັດທິມາກ-ເລນິນ. ພະຍາດສັງຄົມຂອງທຶນນິຍົມບໍ່ອາດຈະປິ່ນປົວໃຫ້ດີດ້ວຍ ການຂະຫຍາຍຕົວດ້ານເຕັກນິກ ແລະ ວິທະຍາສາດໄດ້. ບັນດານັກແນວຄິດ ນາຍທຶນໄດ້ກ້າວໄປເຖິງການສະຫລຸບວ່າ ຖ້າບໍ່ມີການວາງພື້ນຖານແນວຄິດແລ້ວຊົນຊັ້ນນາຍທຶນບໍ່ສາມາດຈະປົກປັກຮັກສາຜົນປະໂຫຍດຂອງຕົນໄດ້. ທິດສະດີຟື້ນຟູແນວຄິດໄດ້ຂຶ້ນມາແທນທີ່ ທິດສະດີເສື່ອມເສຍແນວຄິດ. ທາດແທ້ຂອງມັນ ຢູ່ບ່ອນວ່າ ແນວຄິດໃນໂລກປະຈຸບັນນີ້ແມ່ນອາວຸດທີ່ເຂັ້ມແຂງແຮງກ້າແລະ ໂລກທຶນນິຍົມຕ້ອງຄົ້ນຄວ້າລະບົບແນວຄິດຂອງຕົນເພື່ອຢືນຢັນຄວາມຈຳເປັນ ຂອງການຄົງຢູ່ຂອງມັນ, ປົກປັກຮັກສາຜົນປະໂຫຍດຂອງນາຍທຶນ ແລະ ຕ້ານທານກັບແນວຄິດຂອງຊົນຊັ້ນກຳມະກອນ.

ລັດທິແຜ່ຂະຫຍາຍຊາດຢິວ ໄດ້ກາຍເປັນອາວຸດຂອງພວກປະຕິການຈັກກະພັດນິຍົມ ທີ່ແນໃສ່ເພື່ອມ້າງເພຄວາມສາມັກຄີສາກົນ ລະຫວ່າງຊາວ ຜູ້ອອກແຮງງານ, ເພື່ອ ທຳລາຍຫລັກການລັດທິສາກົນກຳມາຊີບ. ພື້ນຖານດ້ານສັງຄົມຂອງລັດທິແຜ່ຂະຫຍາຍຊາດຢິວ ແມ່ນບັນດາຊັ້ນຄົນອັນແນ່ນອນໃນ ຈຳນວນນາຍທຶນຊາວຢິວ ທີ່ໄດ້ຮ່ວມຫົວກັນກັບບັນດາວົງການປະຕິການຂວາຈັດ ໃນສະຫະລັດອາເມລິກາ, ອິສຣາແອນ ແລະ ບັນດາປະເທດທຶນນິຍົມຕ່າງໆ.

ແນວຄິດພື້ນຖານຂອງລັດທິແຜ່ຂະຫຍາຍຊາດຢິວ ແມ່ນການສັບປົນ ຄົນເລທິດສະດີຈິດຕະນິຍົມຕ່າງໆ, ແນວຄິດປະຕິຮູບສັງຄົມ, ລັດທິຊາດນິຍົມແລະຄຳພີສາສະໜາໃກ້ງລັດທິຢິວ. ລັດທິຢິວ ຢືນຢັນວ່າ ຊາວຢິວທຸກຄົນ, ໂດຍບໍ່ຂຶ້ນກັບວ່າພວກເຂົາຈະຢູ່ໃສ ແລະ ຢູ່ໃນຊົນຊັ້ນໃດ, ລ້ວນແຕ່ປະກອບເປັນ"ຮ່າງກາຍອັນດຽວ ແລະ ຈິດໃຈອັນດຽວ". ພວກລັດທິແຜ່ຂະຫຍາຍຊາດຢິວ ເວົ້າກ່ຽວກັບ "ຊາດຢິວທົ່ວໂລກ", ກ່ຽວກັບລັກສະນະພິເສດ ແລະ ຄວາມດີເລີດຂອງພວກເຂົາເໜືອປະຊາຊົນຊາດອື່ນໆ, ຢັ້ງຢືນວ່າ ລັດທິກອມມູນິດບໍ່ອາດ-ຈະຢູ່ຮ່ວມກັບຈິດໃຈຊາວຢິວ, ກັບຈິດຕະສາດແຫ່ງຊາດຂອງຊາວຢິວ. ພວກເຂົາພະຍາຍາມວາງພື້ນຖານໃຫ້ແກ່ຂໍ້ອໍມິດໄສ ກ່ຽວກັບຄວາມບໍ່ສາມາດຈະແກ້ໄຂການປະທະລະຫວ່າງບັນດາເຊື້ອຊາດ, ຄວາມອາຄາດບາດໝາງກັນ ຕະຫລອດການລະຫວ່າງເຊື້ອຊາດ, ປະຕິເສດການຕໍ່ສູ້ຊົນຊັ້ນ ແລະ ເອົາການຍຸແຍ່ການປະທະລະຫວ່າງຊາດມາ ແທນທີ່ການຕໍ່ສູ້ຊົນຊັ້ນ.

ເນື້ອໃນພື້ນຖານດ້ານແນວຄິດການເມືອງຂອງລັດທິແຜ່ຂະຫຍາຍຊາດ ຢິວແມ່ນລັດທິຈຳແນກເຊື້ອຊາດ, ກະຫາຍສົງຄາມ, ລັດທິໂຊແວງ, ລັດທິ ຕ້ານກອມມູນິດ ແລະ ລັດທິຕ້ານໂຊວຽດ. ຈຸດປະສົງທາງຊົນຊັ້ນຕົ້ນຕໍຂອງລັດທິແຜ່ຂະຫຍາຍຊາດຢິວ ໃນໄລຍະປະຈຸບັນນີ້ແມ່ນຜູກແໜ້ນຖານະຂອງຈັກກະພັດ ນິຍົມ, ພະຍາຍາມທຳລາຍສັງຄົມນິຍົມ, ມ້າງເພການຕໍ່ສູ້ປົດປ່ອຍຊາດຂອງບັນດາປະຊາຊາດຢູ່ພາກຕາເວັນອອກໃກ້, ຢູ່ທະວີບອາຟຣິກກາ ແລະໃນຂົງເຂດອື່ນໆ.

ໃນສະໄໝຂອງຕົນ ວ.ອິ.ເລນິນ ໄດ້ຕຳໜິວິຈານລັດທິແຜ່ຂະຫຍາຍ - ຊາດຢິວຢ່າງຮາບຄາບ. ໂດຍເຜີຍແບທາດແທ້ຂອງລັດທິແຜ່ຂະຫຍາຍຊາດຢິວວ່າເປັນຄືທ່າອຽງຊາດນິຍົມ-ນາຍທຶນທີ່ປະຕິການ, ທີ່ຕ້ານກັບການປະຕິວັດ,

ລັດທິສາກົນກຳມາຊີບ ແລະ ຕ້ານສັງຄົມນິຍົມ, ວ.ອີ.ເລນິນ ໄດ້ຊີ້ແຈງ ໃຫ້ເຫັນໄພອັນຕະລາຍຂອງມັນສຳລັບຂະບວນການກຳມະກອນ. ການຕຳໜິ ວິຈານຂອງ ເລນິນ ຕໍ່ລັດທິແຜ່ຂະຫຍາຍຊາດຢືວ ຍັງຮັກສາຄວາມໝາຍ ຢ່າງເຕັມສ່ວນຕໍ່ທິດສະດີ ແລະ ພຶດຕິກຳຕົວຈິງຂອງທ່າອຽງຊາດນິຍົມປະຕິການ ນີ້ຈົນເຖິງປະຈຸບັນ.

ລັດທິສວຍໂອກາດ ເປັນຜູ້ໝູນໃຊ້ແນວຄິດນາຍທຶນເຂົ້າໃນຂະບວນ ການກຳມະກອນ. ລັດທິສວຍໂອກາດ ແມ່ນທ່າອຽງແນວຄິດໃນຂະບວນການກຳມະກອນ ທີ່ຢູ່ພາຍໃຕ້ອິດທິພົນຂອງແນວຄິດ ແລະ ການເມືອງຂອງນາຍທຶນ ແລະ ພະຍາຍາມເຮັດໃຫ້ຜົນປະໂຫຍດຂອງຊົນຊັ້ນກຳມະກອນຍອມກັບທຶນ. ການ ສະແດງຕົວທີ່ມີລັກສະນະພິເສດຂອງລັດທິສວຍໂອກາດນັ້ນ ແມ່ນລັດທິປະຕິຮູບແລະລັດທິແກ້. ພ້ອມກັບການກ້າວເຂົ້າສູ່ຍຸກສະໄໝຈັກກະພັດນິຍົມ ລັດທິສວຍໂອ-ກາດໄດ້ກາຍເປັນທ່າອຽງສາກົນ ແລະ ສະແດງອອກໃນສອງຮູບແບບຄື: ອຽງຂວາ ແລະ "ອຽງຊ້າຍ". ລັດທິສວຍໂອກາດອຽງຂວາ ປະຕິເສດວິທີການຕໍ່ສູ້ປະຕິວັດ ແລະ ຜະເດັດການກຳມາຊີບ, ປະຕິບັດແນວທາງການຮ່ວມມື ກັນລະຫວ່າງບັນດາຊົນຊັ້ນທີ່ເປັນປໍລະປັກກັນ, ປະກາດເສັ້ນທາງປະຕິຮູບ,ໝາຍຄວາມວ່າ "ປົວແປງ"·ລັດທິທຶນນິຍົມໂດຍບໍ່ປ່ຽນແທນມັນດ້ວຍສັງຄົມນິຍົມ.ລັດທິສວຍໂອກາດອຽງຊ້າຍ ຮຽກຮ້ອງໃຫ້ດຳເນີນການປະຕິວັດໂດຍປາສະ ຈາກການກະກຽມ, ໂດຍບໍ່ຍອມຮັບວ່າຈະມີເງື່ອນໄຂພາວະວິໄສ ທີ່ຈຳເປັນເພື່ອດຳເນີນການປະຕິວັດດັ່ງກ່າວຫລືບໍ່. ບັນດານັກລັດທິສວຍໂອກາດ "ອຽງຊ້າຍ " ຕ້ານການຕໍ່ສູ້ເພື່ອສິດທິຂອງຊາວຜູ້ອອກແຮງງານພາຍໃຕ້ລະບອບທຶນນິຍົມ,ປະຕິເສດການໝູນໃຊ້ບັນດາສະຖາບັນປະຊາທິປະໄຕນາຍທຶນເພື່ອຜົນປະໂຫຍດ-ຂອງການຕໍ່ສູ້ຊົນຊັ້ນຂອງຊົນຊັ້ນກຳມາຊີບ. ພວກ"ອຽງຊ້າຍ"ມັກຈະຫັນ ໄປເປັນກຸ່ມຫົວຮຸນແຮງ ແລະ ກຸ່ມກໍ່ກວນ ທຳຮ້າຍ.ລັດທິສວຍໂອກາດ"ອຽງຊ້າຍ" ຮັບໃຊ້ໃຫ້ປະຕິການຈັກກະພັດນິຍົມຢ່າງພາວະວິໄສ.

ລັດທິປະຕິຮູບ ແມ່ນທ່າອຽງການເມືອງພາຍໃນຊົນຊັ້ນກຳມະກອນ ທີ່ປະຕິເສດຄວາມຈຳເປັນຕ້ອງດຳເນີນການຕໍ່ສູ້ຊົນຊັ້ນ, ປະຕິເສດການປະຕິວັດ ສັງຄົມນິຍົມ ແລະ ຜະເດັດການກຳມາຊີບ. ບັນດານັກລັດທິປະຕິຮູບສະໜັບສະ-ໜູນການຮ່ວມມືກັນລະຫວ່າງບັນດາຊົນຊັ້ນ, ພະຍາຍາມຢາກຈະລຸລ່ວງ ໃຫ້

ຊາວຜູ້ອອກແຮງງານຮັບຮູ້ວ່າ ໂດຍໃຊ້ການປະຕິຮູບ ທີ່ດຳເນີນໃນຂອບເຂດຖືກຕ້ອງຕາມກົດໝາຍຂອງນາຍທຶນ ແລະ ບໍ່ໜີອອກຈາກຂອບເຂດຂອງລະບົບທຶນນິຍົມແລ້ວ ກໍ່ສາມາດຈະ "ກ້າວຂຶ້ນ" ສູ່ສັງຄົມນິຍົມໄດ້. ລັດທິສວຍໂອກາດອຽງຂວາ ປະກົດຕົວໃຫ້ເຫັນຢູ່ໃນລັດທິປະຕິຮູບຢ່າງຄົບຖ້ວນ ແລະ ຢ່າງລວມສູນທີ່ສຸດ. ທັດສະນະປັດຊະຍາ ຂອງພວກປະຕິຮູບແມ່ນການສັບປົນຄົນເລບັນດາທັດສະນະລັດທິກັງໃໝ່, ລັດທິຊົງຕົວນິຍົມ,ລັດທິປະຕິຖານນິຍົມໃໝ່ , ລັດທິໂຕມິດໃໝ່ ແລະ ທັດສະນະນາຍທຶນ ແລະ ນາຍທຶນນ້ອຍອື່ນໆ.

ຕາມທຳມະດາແລ້ວ ບັນດານັກແນວຄິດລັດທິປະຕິຮູບ ຜູກພັນຄວາມສຳນຶກຂອງຕົນກ່ຽວກັບ ລັກສະນະ ແລະເສັ້ນທາງຂະຫຍາຍຕົວຂອງສັງຄົມໃນຍຸກສະໄໝປະຈຸບັນນັ້ນກັບທິດສະດີ "ສັງຄົມນິຍົມປະຊາທິປະໄຕ". ໂດຍນຳໃຊ້ ທິດສະດີນາຍທຶນທັນສະໄໝເພື່ອເຮັດໃຫ້ ແນວຄິດລັດທິສວຍໂອກາດແບບເກົ່າ ມີລັກສະນະທັນສະໄໝແລ້ວບັນດາຜູ້ສະໜັບສະໜູນ "ສັງຄົມນິຍົມປະຊາທິປະ-ໄຕ" ປະຕິເສດບັນດາຂໍ້ວິນິດໄສ ຂອງທິດສະດີ ມາກ-ເລນິນ ທີ່ສຳຄັນ ທີ່ສຸດກ່ຽວກັບຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ, ກ່ຽວກັບລັດທິຈັກກະພັດນິຍົມ,ກ່ຽວກັບການປະຕິວັດສັງຄົມນິຍົມ. ບໍ່ແມ່ນການປະຕິວັດສັງຄົມນິຍົມທີ່ຈະນຳໄປເຖິງ - ການປ່ຽນແທນການພົວພັນແຫ່ງການຜະລິດແບບທຶນນິຍົມ ດ້ວຍການພົວພັນການຜະລິດແບບສັງຄົມນິຍົມ, ຫາກແມ່ນ "ວິວັດທະນາການທາງດ້ານສິນທຳ" ແບບບໍ່ຢຸດບໍ່ຢັ້ງ ຂຶ້ນສູ່ "ຄວາມສະເໝີພາບລວມທົ່ວໄປ" ໃນເງື່ອນໄຂທຶນນິຍົມນັ້ນແມ່ນຄຳຂວັນທີ່ພື້ນຖານຂອງ "ສັງຄົມນິຍົມປະຊາທິປະໄຕ". ບັນດາຜູ້ສະໜັບສະໜູນ "ສັງຄົມປະຊາທິປະໄຕ" ເບິ່ງສັງຄົມນິຍົມບໍ່ຄືກັນກັບ ໝາກຜົນທີ່ຖືກຕ້ອງຕາມກົດເກນ ຂອງຄວາມຂັດແຍ່ງ ພາຍໃນລະບົບທຶນນິຍົມ ທີ່ນັບມື້ນັບ - ຮ້າຍແຮງຢ່າງຫລີກເວັ້ນບໍ່ໄດ້ ທີ່ແກ້ໄຂດ້ວຍວິທີທາງແຫ່ງການຕໍ່ສູ້ຊົນຊັ້ນ ຂອງຊົນຊັ້ນກຳມະກອນຕ້ານຊົນຊັ້ນນາຍທຶນ, ແກ້ໄຂດ້ວຍການທີ່ຊົນຊັ້ນກຳມະກອນ-ຍາດເອົາອຳນາດການປົກຄອງທາງການເມືອງ ແລະ ຍຶດເອົາພາຫະນະການຜະລິດ ມາເປັນຂອງສັງຄົມ, ຫາກແມ່ນ "ອຸດົມຄະຕິດ້ານສິລະປະທັດ " ທີ່ຢູ່ນອກການຕໍ່ສູ້ຊົນຊັ້ນ ທີ່ທຸກຄົນ ລວມທັງນາຍທຶນ ແລະ ຊົນຊັ້ນກຳມາຊີບ ລ້ວນແຕ່ຮ່ວມກັນມຸ່ງໜ້າໄປສູ່ທັງນັ້ນ.

ຮູບແບບພິເສດ ຂອງລັດທິສວຍໂອກາດ ແມ່ນລັດທິແກ້ ອັນເປັນທິດທາງ-

ລັດທິສວຍໂອກາດ ພາຍໃນຂະບວນການກຳມະກອນປະຕິວັດ ທີ່ອ້າງອີງເຖິງ- "ການປັບປຸງ", "ການເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງ" ທິດສະດີ - ມາກ- ເລນິນ ແລ້ວ ປະຕິບັດການດັດແກ້, ຄົ້ນຄວ້າຄືນໃໝ່ບັນດາຂໍ້ວິນິດໄສ ທີ່ສຳຄັນທີ່ສຸດ ຂອງລັດທິ ມາກ-ເລນິນ. ພວກລັດທິແກ້ຮຽກຮ້ອງໃຫ້ປະຕິເສດ ຂໍ້ວິນິດໄສພື້ນຖານລັດທິ ຂອງ ກ.ມາກ, ຟ.ອັງແກນ ແລະ ວ.ອີ. ເລນິນ ຢ່າງເປັນພົນດີໃຫ້ແກ່ແນວຄິດນາຍທຶນ. ລັດທິແກ້ສະໄໝໃໝ່ ພະຍາຍາມ - ຢາກທັບຖົມທິດສະດີລັດທິ ມາກ-ເລນິນ ທີ່ຍິ່ງໃຫຍ່, ປະກາດວ່າທິດສະດີນີ້ໄດ້ " ພົ້ນສະໄໝ" ໄປແລ້ວ, ວ່າໄດ້ສູນເສຍຄວາມສັກສິດ ແລະ ຄວາມໝາຍ ສຳລັບການຂະຫຍາຍຕົວຂອງສັງຄົມ. ບັນດາລັດທິແກ້ພະຍາຍາມຢາກທຳລາຍ ຄວາມເຊື່ອໝັ້ນ ຂອງຊົນຊັ້ນກຳມະກອນ ແລະ ປະຊາຊົນຊາວຜູ້ອອກແຮງ - ງານຕໍ່ສັງຄົມນິຍົມ.ພວກເຂົາຕ້ານຄວາມຈຳເປັນດ້ານປະຫວັດສາດໃນການດຳ ເນີນການປະຕິວັດສັງຄົມນິຍົມ ແລະ ສ້າງຕັ້ງພະເດັດການກຳມາຊີບ, ປະຕິ ເສດບົດບາດນຳພາຂອງຊົນຊັ້ນກຳມະກອນ ແລະ ຂອງພັກລັດທິມາກ- ເລນິນ ຂອງຊົນຊັ້ນກຳມະກອນ, ປະຕິເສດຫລັກການລັດທິສາກົນກຳມາຊີບ, ຫວງໃຫ້ ປະຕິເສດ ບັນດາຫລັກການພື້ນຖານ ຂອງເລນິນ ກ່ຽວກັບການກໍ່ສ້າງພັກແລະ ກ່ອນອື່ນໝົດ ປະຕິເສດຫລັກການລວມສູນປະຊາທິປະໄຕ, ສົ່ງເສີມ ການຫັນ ບັນດາພັກກອມມູນິດ ໃຫ້ກາຍເປັນອັນທີ່ຄ້າຍຄືກັນກັບສະໂມສອນສົນທະນາກັນ.

ລັດທິແກ້ໄດ້ແຍກອອກເປັນລັດທິແກ້ອ່ຽງຂວາ ແລະ "ອ່ຽງຊ້າຍ". ຕາມທັດ ສະນະພື້ນຖານຂອງມັນແລ້ວ ລັດທິແກ້ອ່ຽງຂວາໃກ້ຊິດກັບລັດທິປະຕິຮູບ, ເຊື່ອມ ຈອດເຂົ້າກັນກັບລັດທິດັ່ງກາວ. ພື້ນຖານສັງຄົມຂອງມັນແມ່ນນາຍທຶນນ້ອຍ"ກຳ ມະກອນຊຸນນາງ" ໝາຍຄວາມວ່າແມ່ນສ່ວນໜຶ່ງໃນຊົນຊັ້ນກຳມະກອນ ທີ່ໄດ້ ຮັບເງິນເດືອນສູງ ແລະ ຖືກພວກນາຍທຶນຊື້ຈ້າງ. ເຊັ່ນດຽວກັນກັບ ພວກລັດ ທິປະຕິຮູບ, ພວກນັກລັດທິແກ້ອ່ຽງຂວາ ພະຍາຍາມບໍ່ສັງເກດເຫັນຄວາມ ຂັດ ແຍ່ງລະຫວ່າງນາຍທຶນ ແລະ ຊາວກຳມະກອນ, ພະຍາຍາມຢາກພິສູດວ່າ - ຄວາມຂັດແຍ່ງດັ່ງກ່າວບໍ່ມີລັກສະນະເປັນປໍລະປັກກັນ. ພວກເຂົາປະຕິເສດ - ການຕໍ່ສູ້ຊົນຊັ້ນ ແລະຄວາມຈຳເປັນຕ້ອງດຳເນີນການປະຕິວັດສັງຄົມນິຍົມ,ຢືນ ຢັນລັກສະນະເດັດຖານຂອງເສັ້ນທາງປະຕິຮູບທີ່ບໍ່ແຕະຕ້ອງເຖິງພື້ນຖານ ຂອງ ລະບອບທຶນນິຍົມ, ສະໜັບສະໜູນການຮັກສາກຳມະສິດສ່ວນຕົວ, ປະຕິບັດ

ແນວທາງຜ່ອນສັ້ນຜ່ອນຍາວ ແລະ ເຫັນດີເຫັນພ້ອມກັບສັດຕູທາງຊົນຊັ້ນ, ໂຄສະນາ "ສັນຕິພາບລະຫວ່າງບັນດາຊົນຊັ້ນ". ບັນດານັກລັດທິແກ້ອຽງຂວາປະຕິເສດບົດບາດຂອງກຳລັງຊຸນແຮງປະຕິວັດ, ບໍ່ຮັບຮູ້ຄວາມຈຳເປັນຕ້ອງທັບມ້າງກົງຈັກລັດຂອງນາຍທຶນ ແລະ ສ້າງຕັ້ງພະເດັດການກຳມາຊີບ, ເຮັດໃຫ້ ສັງຄົມນິຍົມ ແລະ ທຶນນິຍົມກ້າວໄປຄຽງຄູ່ຂະໜານກັນ, ໂດຍຮຽກສັງຄົມນິຍົມ-ເປັນ "ທຶນນິຍົມແຫ່ງລັດ".

ລັດທິແກ້"ອຽງຊ້າຍ" ມີລັກສະນະພິເສດຄື ລັດທິສ່ຽງໄພ ແລະ ລັດທິອະນາທິປະໄຕໃນການແກ້ໄຂບັນຫາທີ່ສັບສົນ ໃນການຂະຫຍາຍຕົວດ້ານສັງຄົມ . ລັກສະນະໄຮ້ສາລະ ແລະ ຜົນຮ້າຍຂອງລັດທິແກ້ "ອຽງຊ້າຍ" ນັ້ນ ວ.ອີ . ເລນິນ ໄດ້ຊີ້ແຈງອອກໃນບົດນິພົນ "ພະຍາດໄຮ້ດຽງສາ ໃນລັດທິກອມມູນິດນິຍົມ ". ບັນດານັກລັດທິແກ້ "ອຽງຊ້າຍ" ປະຕິເສດຄວາມຈຳເປັນຂອງ ສະພາວະການປະຕິວັດ, ໝາຍຄວາມວ່າ ການສັງລວມບັນດາເງື່ອນໄຂພາວະວິໄສດ້ານເສດຖະກິດ ແລະ ການເມືອງ ເພື່ອດຳເນີນການປະຕິວັດສັງຄົມນິຍົມ. ພວກເຂົາຕ້ານບົດບາດປະຕິວັດຂອງຊົນຊັ້ນກຳມະກອນ ແລະ ບໍ່ຮັບຮູ້ວ່າຊົນຊັ້ນກຳມະກອນແມ່ນກຳລັງຊຸກດັນຂອງການປະຕິວັດ. ພວກເຂົາຖືວ່າບັນດາ ພາກສ່ວນປະຕິວັດໃນສັງຄົມແມ່ນນັກສຶກສາ, ປັນຍາຊົນ, ນາຍທຶນນ້ອຍ ແລະຊາວກຳມາຊີບ ທີ່ປະສົບຄວາມຫຼົ້ມຈົມໃນຊີວິດ. ພວກ "ອຽງຊ້າຍ" ຕ້ານຄວາມສາມັກຄີລະຫວ່າງບັນດາກຳລັງປະຕິວັດ, ຖືເບົາບົດບາດຂອງລະບົບສັງຄົມນິຍົມແຫ່ງໂລກ. ພວກເຂົາຮຽກຮ້ອງໃຫ້ດຳເນີນການຕໍ່ສູ້ ໂດຍບໍ່ມີທິດທາງໂຄງການ ບໍ່ມີທິດທາງເປົ້າໝາຍຂອງການຕໍ່ສູ້ດັ່ງກ່າວ. ວ.ອີ.ເລນິນ ໄດ້ຕີລາຄາລັດທິແກ້-"ອຽງຊ້າຍ" ເປັນຄືຈິດຕະສາດຂອງນາຍທຶນນ້ອຍທີ່ປ່ວງບ້າ. ທ່ານໄດ້ ຂຽນວ່າ ສຳລັບນັກປະຕິວັດທີ່ແທ້ຈິງແລ້ວ ໄພອັນຕະລາຍໃຫຍ່ຫຼວງທີ່ສຸດແມ່ນການເວົ້າເຖິງ ລັກສະນະປະຕິວັດເກີນຄວາມຈິງ ການຫຼົງລືມຂອບເຂດ ແລະເງື່ອນໄຂຂອງການນຳໃຊ້ວິທີການປະຕິວັດ ທີ່ເໝາະສົມຢ່າງໄດ້ຮັບຜົນດີ.

ລັດທິແກ້ "ອຽງຊ້າຍ" ກໍ່ຄືອຽງຂວາ ມີບົດບາດປະຕິການຢ່າງພາວະວິ-ໄສ ໃນຂະບວນການປະຕິວັດໂລກ. ບັນດານັກລັດທິ ມາກ-ເລນິນໄດ້ດຳເນີນ ແລະ ພວມດຳເນີນການຕໍ່ສູ້ຢ່າງໜຽວແໜ້ນ ແລະ ຢ່າງບໍ່ປະນີປະນອມຕ້ານພວກສ່ວງອິດທິພົນຂອງນາຍທຶນ ໃສ່ຊົນຊັ້ນກຳມະກອນ. ພວກເຂົາເຈົ້າ ຕອບ

ຕ້ານຢ່າງເດັດດ່ຽວຕໍ່ບັນດານັກລັດທິແກ້ ແລະ ພວກອື່ນໆທີ່ລວງລະເມີດ ລັດທິມາກ-ເລນິນ ກ່ຽວກັບການດັດສ້າງສັງຄົມ ບົນພື້ນຖານສັງຄົມນິຍົມ.

ການເປີດເຜີຍແບທາດແທ້ຂອງພວກອົດຕະທິກໍາລັງປະຕິການ ທີ່ຢືນຢູ່ໃນທັດສະນະຕ້ານກອມມູນິດ, ເປີດເຜີຍບັນດາວິທີການ ແລະ ພາຫະນະທີ່ພວກເຂົາເຈົ້າ - ໝູນໃຊ້ ເພື່ອມ້າງເພທໍາລາຍທິດສະດີ ແລະ ພຶດຕິກໍາຕົວຈິງ ຂອງສັງຄົມນິຍົມນັ້ນ ແມ່ນໜຶ່ງໃນບັນດາປັດໄຈທີ່ສໍາຄັນໃນການຕໍ່ສູ້ ຕ້ານກົນອຸບາຍຂອງຈັກກະພັດນິຍົມໃນຂົງເຂດແນວຄິດ ແລະ ແມ່ນໜຶ່ງໃນຈໍານວນພາຫະນະທີ່ສັກສິດໃນການຕໍ່ສູ້ລວມ ເພື່ອອະນາຄົດອັນສະຫວ່າງສະໄຫວດີ ລັດທິກອມມູນິດນິຍົມ.

# ສາລະບານ


| | ໜ້າ |
|---|---|
| ລັດທິວັດຖຸນິຍົມສັດຈະວິພາກ | 3 |
| ພາກທີ ໜຶ່ງ ປັດຊະຍາແມ່ນຫຍັງ ? ຄວາມໝາຍຂອງມັນໃນ ຊີວິດຂອງສັງຄົມ | 5 |
| ໑. ປັດຊະຍາຄົ້ນຄວ້າບັນຫາຫຍັງ ? ບັນຫາພື້ນຖານຂອງປັດຊະຍາ | 5 |
| ໒. ບັນຫາແບບວິທີໃນປັດຊະຍາ | 11 |
| ໓. ຈຸດພິເສດຂອງປັດຊະຍາ ມາກ-ເລນິນ, ທີ່ຕັ້ງຂອງ ມັນໃນທ່າມກາງວິທະຍາສາດອື່ນໆ | 13 |
| ໔. ລັກສະນະພັກ, ລັກສະນະປະດິດສ້າງ ແລະຄວາມໝາຍຂອງປັດຊະຍາ ມາກ-ເລນິນ | 18 |
| ພາກທີ ສອງ ຄວາມເປັນເອກະພາບຂອງໂລກ ແລະລັກສະນະເປັນວັດຖຸຂອງມັນ | 21 |

ໜ້າ

໑. ຄຳນິຍາມວັດຖຸ .............................. 21
໒. ຄວາມເປັນເອກະພາບດ້ານວັດຖຸຂອງໂລກ .......... 25
໓. ການເຄື່ອນໄຫວແມ່ນວິທີດຳລົງຢູ່ຂອງວັດຖຸ .......... 30
໔. ກາງຫາວ ແລະ ກາລະເວລາ ແມ່ນຮູບແບບການດຳລົງ ຢູ່ຂອງວັດຖຸທີ່ເຄື່ອນໄຫວ .................... 36

ພາກທີ ສາມ ວັດຖຸ ແລະ ຈິດສຳນຶກ. ຕົ້ນກຳເນີດ ແລະທາດແທ້ຂອງຈິດສຳນຶກ .............................. 44
໑. ການພົວພັນກັນລະຫວ່າງວັດຖຸ ແລະ ຈິດສຳນຶກ. ທາດແທ້ຂອງຈິດສຳນຶກ .............................. 44
໒. ຕົ້ນກຳເນີດ ແລະ ການຂະຫຍາຍຕົວຂອງຈິດສຳນຶກ ... 50
໓. ສາຍພົວພັນຊຶ່ງກັນ ແລະ ກັນລະຫວ່າງພາສາ ແລະ ຈິນຕະນາການ .............................. 54
໔. ລັກສະນະຕັ້ງໜ້າແບບປະດິດສ້າງຂອງຈິດສຳນຶກ ..... 57

ພາກທີ ສີ່ ການຂະຫຍາຍຕົວຂອງໂລກ. ສັດຈະວິພາກດີທິດສະດີ ວ່າດ້ວຍການຂະຫຍາຍຕົວ ແລະ ສາຍພົວພັນລວມທົ່ວໄປ ..... 60
໑. ລັກສະນະພິເສດທົ່ວໄປຂອງສັດຈະວິພາກວັດຖຸນິຍົມ .... 60
໒. ການເຄື່ອນໄຫວ ແລະ ການຂະຫຍາຍຕົວຂອງໂລກ ວັດຖຸ .............................. 61
໓. ການພົວພັນລວມທົ່ວໄປລະຫວ່າງປະກົດການ ຂອງຄວາມເປັນຈິງ .............................. 64
໔. ຄວາມໝາຍຂອງສັດຈະວິພາກ ວັດຖຸນິຍົມ ......... 68

ພາກທີ ຫ້າ ກົດເກນ ແລະ ມາດຕະເກນສັດຈະວິພາກວັດຖຸນິຍົມ.... 71
໑. ຄວາມເປັນເອກະພາບ ແລະ ການຕໍ່ສູ້ຂອງສິ່ງ ກົງກັນຂ້າມ .............................. 71

ໜ້າ

໒. ການຂ້າມຜ່ານແຕ່ການປ່ຽນແປງດ້ານປະລິມານ ໄປສູ່ການປ່ຽນແປງດ້ານຄຸນນະພາບ .................. 80

໓. ການປະຕິເສດ ແຫ່ງຄວາມປະຕິເສດ ............ 88

໔. ອັນສະເພາະ, ພິເສດ ແລະ ລວມ ............ 96

໕. ເຫດ ແລະ ຜົນ .................... 100

໖. ຄວາມຈຳເປັນ ແລະ ຄວາມບັງເອີນ ........ 105

໗. ເນື້ອໃນ ແລະ ຮູບແບບ ................ 108

໘. ທາດແທ ແລະ ປະກົດການ ................ 111

໙. ຄວາມອາດເປັນໄປໄດ້ ແລະ ຄວາມເປັນຈິງ ....... 115

ພາກທີ ຫົກ ຄົນຮັບຮູ້ໂລກຮອບຕົວ ແນວໃດ ................ 119

໑. ຄວາມຮັບຮູ້ແມ່ນຫຍັງ ? ................ 119

໒. ບົດບາດຂອງພຶດຕິກຳຕົວຈິງຂອງຂະບວນການວິວັດ ຄວາມຮັບຮູ້ ........................ 121

໓. ທິດສະດີວ່າດ້ວຍສັດຈະທຳ ................ 125

໔. ບົດບາດຂອງການສ່ອງແສງທາງອະໄວຍະວະຄວາມຮູ້ສຶກ ແລະ ຈິນຕະນາການ ຕັກກະສາດໃນຄວາມຮັບຮູ້ ..... 129

໕. ວິທີຮັບຮູ້ແບບວິທະຍາສາດ ................ 132

ພາກທີ ເຈັດ ການຕຳໜິວິຈານປັດຊະຍານາຍທຶນສະໄໝໃໝ່ .... 137

໑. ວິກິດການຂອງປັດຊະຍານາຍທຶນ ............ 137

໒. ລັດທິໂຕມິດໃໝ່ .................... 141

໓. ລັດທິປະຕິຖານນິຍົມໃໝ່ (ໂປຊິຕີວິດນິຍົມໃໝ່) ..... 146

໔. ລັດທິຊົງຕົວນິຍົມ .................. 152

໕. ປັດຊະຍາ ສາຂາ ຟຣັງເສີດ ............... 157

ໜ້າ


ລັດທິວັດຖຸນິຍົມປະຫວັດວິພາກ .................... 163

ພາກທີ ໜຶ່ງ ລັດທິວັດຖຸນິຍົມວິທະຍາສາດແມ່ນທິດສະດີປັດຊະຍາ ກ່ຽວກັບສັງຄົມ .............................. 165

໑. ການກຳເນີດຂອງລັດທິວັດຖຸນິຍົມປະຫວັດວິພາກ ...... 165

໒. ກົດເກນ ແລະ ມາດຕະເກນຂອງລັດທິວັດຖຸນິຍົມ ປະຫວັດວິພາກ ............................ 170

໓. ລັກສະນະພັກ ແລະ ລັກສະນະປະດິດສ້າງຂອງລັດທິວັດຖຸນິຍົມປະຫວັດວິພາກ .................. 178

ພາກທີ ສອງ ສັງຄົມ ແລະ ທຳມະຊາດ ................ 182

໑. ການກະທົບຊຶ່ງກັນ ແລະ ກັນລະຫວ່າງສັງຄົມ ແລະ ທຳມະຊາດ ............................ 182

໒. ພົນລະເມືອງ ແລະ ບົດບາດຂອງມັນໃນຊີວິດຂອງສັງຄົມ. 193

ພາກທີ ສາມ ຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ............. 200

໑. ຈຸດພິເສດພົ້ນຖານຂອງຮູບຖານຈັດຕັ້ງ ສັງຄົມ-ເສດຖະກິດ 200

໒. ສັດຈະວິພາກຂອງກຳລັງແຫ່ງການຜະລິດ ແລະ ການ ພົວພັນແຫ່ງການຜະລິດ ..................... 205

໓. ໂຄງລ່າງ ແລະ ໂຄງເບິ້ນ ..................... 209

໔. ການຂະຫຍາຍຕົວຂອງຮູບຖານຈັດຕັ້ງສັງຄົມ-ເສດຖະກິດ ແລະ ຄວາມກ້າວໜ້າທາງສັງຄົມ .............. 216

ພາກທີ ສີ່ ໂຄງປະກອບຊົນຊັ້ນ-ສັງຄົມໃນສັງຄົມ ແລະ ການພົວພັນດ້ານຊົນຊາດ ............................

໑. ໂຄດວົງ, ກົກເຫລົ່າ, ເຜົ່າຊົນ, ປະຊາຊາດ ..... 224

໒. ຊົນຊັ້ນ ແລະ ການພົວພັນລະຫວ່າງຊົນຊັ້ນ ........ 234

ໜ້າ


ສ. ສັງຄົມນິຍົມ ແລະ ບັນດາຈີນຈຸ້ນ ................ 242

ພາກທີ ຫ້າ ການປະຕິວັດສັງຄົມ.................... 253
໑. ຄວາມຮູ້ກ່ຽວກັບການປະຕິວັດສັງຄົມ ............ 253
໒. ທິດສະດີ ເລນິນ ກ່ຽວກັບການປະຕິວັດ ສັງຄົມນິຍົມ.... 260
ສ. ຂະບວນການປະຕິວັດໂລກ ແລະ ການປະຕິວັດຊາດ- ປະຊາທິປະໄຕ ........................ 266

ພາກທີ ຫົກ ລະບົບການເມືອງຂອງສັງຄົມ ............. 270
໑. ລະບົບການເມືອງຂອງສັງຄົມນາຍທຶນ ............ 271
໒. ລະບົບການເມືອງຂອງສັງຄົມ ສັງຄົມນິຍົມ ......... 275
ສ. ຈຸດພິເສດຂອງລະບົບການເມືອງຂອງສັງຄົມນິຍົມ ທີ່ຂະຫຍາຍຕົວ ແລະ ທ່າຂະຫຍາຍຕົວຂອງມັນ ......... 280

ພາກທີ ເຈັດ ສະຕິສັງຄົມແລະບົດບາດຂອງມັນໃນຊີວິດຂອງສັງຄົມ... 287
໑. ຄວາມຮູ້ກ່ຽວກັບສະຕິສັງຄົມແລະໂຄງປະກອບຂອງມັນ... 287
໒. ຄວາມເປັນເອກະລາດແບບທຽບຖານຂອງສະຕິສັງຄົມແລະບົດບາດຂອງມັນໃນສັງຄົມ ................ 296
ສ. ຮູບແບບຂອງສະຕິສັງຄົມ .................... 301

ພາກທີ ແປດ ປະຊາຊົນແມ່ນຜູ້ສ້າງປະ ຫວັດສາດ ............ 323
໑. ວ່າດ້ວຍຄວາມຮູ້ກ່ຽວກັບ "ປະຊາຊົນ", "ມະຫາຊົນ".. 324
໒. ບົດບາດຂອງປະຊາຊົນເປັນຜູ້ສ້າງປະຫວັດສາດ ..... 326
ສ. ບົດບາດຂອງບຸກຄົນໃນປະຫວັດສາດ ............. 334

ພາກທີ ເກົ້າ ການຕໍ່ສູ້ດ້ານແນວຄິດ ແລະ ບັນຫາການຂະຫຍາຍຕົວຂອງສັງຄົມ ........................... 340

ໜ້າ


໑. ຫລັກການຂອງ ເລນິນ ກ່ຽວກັບການຕໍ່ສູ້ຕ້ານກັບ ແນວຄິດນາຍທຶນ ແລະ ລັດທິແກ້ .......................... 343
໔. ການຕຳໜິວິຈານທິດທາງ ແລະ ທັດສະນະຫລັກໝັ້ນ ພື້ນຖານຂອງແນວຄິດນາຍທຶນ ແລະ ລັດທິແກ້ .......... 348

ບັນດາທ່ານຜູ້ອ່ານທີ່ນັບຖື !

ສຳນັກພິມ "ກ້າວໜ້າ" ມີຄວາມຍິນດີຢາກຈະຮັບຟັງຄວາມຄິດເຫັນຂອງທ່ານ ກ່ຽວກັບການແປ ແລະການຮຽບຮຽງປຶ້ມຫົວນີ້. ດັ່ງນັ້ນ ຖ້າຫາກທ່ານມີຄຳສະເໜີ ອັນໃດອັນຈະເປັນການຊ່ວຍໃຫ້ມີການປັບປຸງການພິມໃນຂ້າງໜ້າແລ້ວ ຂໍເຊີນທ່ານສົ່ງຄວາມຄິດເຫັນໄປຍັງ :

I7, Zoubovski boulevard, Moscou,URSS.

ສຳນັກພິມ "ກ້າວໜ້າ" ຂອງພວກເຮົາ ຈັດພິມປຶ້ມ "ການກໍ່ສ້າງພັກ" ເຫລັ້ມນີ້ອອກ ເປັນພາສາລາວ ເຊິ່ງຮຽບຮຽງໂດຍ ກ. ມ. ແຊໂກແລຟ.

ປຶ້ມເຫລັ້ມນີ້ແຕ່ງໂດຍຄະນະອາຈານປະຈຳຂະແໜງການ ກໍ່ສ້າງພັກ ຂອງໂຮງຮຽນພັກຊັ້ນສູງ ທີ່ ມົດສະກູ. ຄະນະດັ່ງກ່າວໄດ້ສຶກສາ ຄົ້ນຄວ້າກົດເກນ ຂອງໂຄງປະກອບທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພັກກອມມູນິດ ແຫ່ງສະຫະພາບໂຊວຽດ ຕະຫລອດທັງມາດຕະຖານ ແຫ່ງການດຳ ຊີວິດປະຈຳວັນພາຍໃນພັກ, ບັນດາຮູບການ ແລະ ວິທີການ ຂອງວຽກງານການເມືອງ ແນວຄິດ ແລະ ການຈັດຕັ້ງໃນໝູ່ມະຫາຊົນ, ການນຳພາຂອງພັກ ໃນການ ກໍ່ສ້າງເສດຖະກິດ ແລະ ວັດທະນະທຳ, ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງມະຫາຊົນຂອງຊາວຜູ້ອອກແຮງງານ.

ຄະນະຜູ້ແຕ່ງປຶ້ມເຫລັ້ມນີ້ ໄດ້ພະຍາຍາມສຸດຂີດ ເພື່ອເຮັດໃຫ້ບັນດາພັກກອມມູນິດ ແລະ ພັກກຳມະກອນ ເອົາໃຈໃສ່ໃນການໝູນໃຊ້ຫລັກການ ເລນິນ ກ່ຽວກັບການກໍ່ສ້າງ ແລະ ການເຄື່ອນໄຫວ ຂອງພັກກອມມູນິດ ແຫ່ງສະຫະພາບໂຊວຽດ, ໃນການປັບປຸງຍຸດທະສາດ ແລະ ຍຸດທະວິທີຂອງຕົນ ໃນການເຮັດໃຫ້ຖັນແຖວຂອງພັກ ເຂັ້ມແຂງກວາເກົາ, ໃນການຮ່ຳຮຽນ ແລະ ນຳໃຊ້ບົດຮຽນຂອງກັນ ແລະກັນ ໂດຍອີງໃສ່ພື້ນຖານແນວທາງການຕໍ່ສູ້ຂອງພັກ.

ປຶ້ມເຫລັ້ມນີ້ ແນ່ໃສ່ຮັບໃຊ້ບັນດາພະນັກງານ ຂອງປະເທດ ອ້າຍນ້ອງ ແລະ ບຸກຄົນ ທີ່ສົນໃຈກ່ຽວກັບການກໍ່ສ້າງສັງຄົມກອມມູນິດ ຢູ່ ສ.ສ.ສ.ຊ. ພາຍໃຕ້ການນຳພາຂອງພັກກອມມູນິດ ແຫ່ງສະຫະພາບໂຊວຽດ.